ແຊກເກີຍ ເບລີອາແອັບ

# ການຜະຈົນໄພຂອງ ເຊມຸຍແອນ ປິນ

ບຸນສິ່ງ ແກ້ວບົວສາ
ສ. ສາຍບຸນມີ

1 9 JAN 2010

ສຳນັກພິມ "ຣາດູກາ"
ມົດສະກູ



ແຊກເກີຍ ເບລືອາແອັບ

# ການຜະຈົນໄພ ຂອງ
# ເຊມຸຍແອນ ປີນ

ແປໂດຍ ສາຍຂອງ

ແຕ້ມຮູບປະກອບໂດຍ ບ. ກຣິຊິນ

С. Беляев

ПРИКЛЮЧЕНИЯ СЭМЮЭЛЯ ПИНГЛЯ

*на лаосском языке*

© ແປເປັນພາສາລາວ ສຳນັກພິມ "ຣາດູກາ", 1989

ISBN 5-05-001591-x

ອຸທິດແດ່ພັນລະຍາຂອງຂ້າພະເຈົ້າ

# ຕອນທີໜຶ່ງ

## I

ເພື່ອເປັນການສວ່າງອາລົມສົມປະສົງ ຕໍ່ຄວາມວິງວອນຮ້ອງຂໍຂອງພັນລະຍາຜູ້ສຸດແສນຮັກແລະ ດະຍິນ, ລູກຊາຍຂອງພວກຂ້າພະເຈົ້າ, ຊຶ່ງເປັນສາສະດາຈານຊີວະວິທະຍາໜຸ່ມຜູ້ໜຶ່ງ, ສະນັ້ນ ຂ້າພະເຈົ້າຈຶ່ງມີຈຸດປະສົງທີ່ຈະບັນລະຍາຍຢູ່ໃນບົດເລົ່ານີ້ ໃຫ້ສົມບູນທີ່ສຸດເທົ່າທີ່ຈະເຮັດໄດ້ ເຖິງເຫດການທີ່ຫນ້າງຶດງໍ້ຕ່າງໆຢູ່ທີ່ເມືອງ ແອສູໂອເຣີ ໃນໄລຍະ ໓໕ ປີກ່ອນນີ້, ພ້ອມດ້ວຍການຜະຈົນໄພຕ່າງໆທີ່ໂຊກຊາຕາໄດ້ຍູ້ຂ້າພະເຈົ້າເຂົ້າໄປໃສ່. ເຫດການຕ່າງໆເຫລົ່ານັ້ນເກີດຂຶ້ນໃນຂະນະທີ່ມວນມະນຸດຫາກໍຟື້ນສະຕິຄືນມາໄດ້ ຫລັງຈາກຄວາມສະຫຍົດສະຫຍອງແຫ່ງສົງຄາມໂລກຄັ້ງທີໜຶ່ງ, ແລະຄຶດເອົາໄວ້ວ່າຈະໄດ້ດຳລົງຊີວິດຢູ່ຢ່າງສັນຕິສຸກເປັນເວລາດົນນານ, ໂດຍທີ່ບໍ່ໄດ້ລະແວງໃຈເອົາໄວ້ເລີຍວ່າ ມໍ່ຈະຖືກຊຸກດັນລົງສູ່ເຫວເລິກແຫ່ງມະຫັນຕະໄພຈາກຍຸດທະກຳອັນໜ້າວິຕົກທີ່ສຸດ.

ອາດເປັນໄປໄດ້ວ່າ, ສຳລັບຄົນຈຳນວນໜຶ່ງແລ້ວ ບັນດາການປ່ຽນແປງ ແລະການສ່ຽງໄພຕ່າງໆຂອງຂ້າພະເຈົ້ານັ້ນ ມີທ່າວ່າບໍ່ຖືກກັບຄວາມຈິງຈັກໜ້ອຍເລີຍ. ແຕ່ແລ້ວ, ຂ້າພະເຈົ້າຊ້ຳກໍວ່າ, ຄວາມກ້າວໜ້າຂອງວິທະຍາການແລະວິທະຍາສາດນັ້ນ ແມ່ນບໍ່ມີຂອບເຂດ, ແລະຫວັງວ່າໃນອະນາຄົດໃກ້ຈະມາເຖິງນີ້, ຂ້າພະເຈົ້າພ້ອມດ້ວຍເພື່ອນຝູງຮຸ່ນຮາວຄາວດຽວກັນກັບຂ້າພະເຈົ້າ ຈະໄດ້ແນມເຫັນການຄົ້ນຄິດປະດິດແຕ່ງຕ່າງໆແລະບັນດາສິ່ງມະຫັດສະຈັນຫລາຍກ່ວາກ້ຳທຽບກັບສິ່ງທີ່ຂ້າພະເຈົ້າວາດເວົ້າຫລືກັບສິ່ງຕ່າງໆ ທີ່ລູກຊາຍຂອງຂ້າພະເຈົ້າຫາກໍຂຽນຂຶ້ນຈາກການຄົ້ນຄວ້າປຶ້ມທີ່ມີຊື່ວ່າ: "ຄຳຕອບກ່ຽວກັບເນື້ອຫາຂອງບັນດາ ວິຣຸດທີ່ສາມາດລອດຈາກການກັ່ນຕອງ" (ປີ ໑໙໖໖).

ບັນດາຄວາມຊົງຈຳກ່ຽວກັບສະໄຫມເຍົາໄວນັ້ນ, ປະຈຸບັນນີ້, ຍັງຄົງກະຕຸ້ນຈູງໃຈຂອງຂ້າພະເຈົ້າຢູ່ຢ່າງເຫລືອທີ່ຈະບັນຍາຍ, ແຕ່ຂ້າພະເຈົ້າຈະພະຍາຍາມບັນທຶກຄວາມຊົງຈຳເຫລົ່ານັ້ນຄືນ ດ້ວຍທຳນອງອັນທຸ່ນທ່ຽງດັ່ງດຽວກັນກັບບັນດານັກປະພັນອາວຸໂສ ເຊື່ອເມື່ອກ່ອນນີ້, ຄາວຍັງເປັນເດັກນ້ອຍ, ພໍ່ຂອງຂ້າພະເຈົ້າໄດ້ສອນໃຫ້ຂ້າພະເຈົ້າອ່ານວັນນະກຳຕ່າງໆຂອງເຂົາເຈົ້າ, ວັນນະກຳຕ່າງໆເຫລົ່ານັ້ນ ໄດ້ສອນໃຫ້ພວກເຮົາຮູ້ຈັກຮັກແພງຢ່າງເລິກເຊິ່ງຕໍ່ປະເທດຊາດອັນສວຍສົດງົດງາມຂອງພວກເຮົາ.

ຂ້າພະເຈົ້າຈະປິ້ມປິຕິຢ່າງຍິ່ງກ້າພວກເພື່ອນຫາກຄົ້ນພົບວິຊາວະກຳຕ່າງໆ ທີ່ມີປະໂຫຍດແລະພໍທີ່ຈະຮຽນເອົາໄດ້ຈາກປຶ້ມເຫລັ້ມນີ້, ເພາະວ່າແສງສະຫວ່າງແຫ່ງວິຊາວະກຳແລະຄວາມຮູ້ນັ້ນຍ່ອມຈະເຍືອງທາງໃຫ້ແກ່ມວນມະນຸດ, ສ່ວນການສັງເກດການຢ່າງລະອຽດລະອໍເຖິງພຶດຕິກຳຂອງທຸກໆຄົນທີ່ຢູ່ອ້ອມຂ້າງນັ້ນຈະເສີມສ້າງຄວາມຮັ່ງມີທາງດ້ານປະສົບປະການໃຫ້ແກ່ແຕ່ລະຄົນ.

ຍ້ອນແນວນັ້ນ, ຂ້າພະເຈົ້າຈຶ່ງໃຫ້ກຳລັງໃຈແກ່ຕົນເອງດ້ວຍຄວາມຫວັງທີ່ວ່າ ທຸກໆຄົນທີ່ມີໂອກາດໄດ້ອ່ານປຶ້ມເຫລັ້ມນີ້ແລ້ວ ກໍລ້ວນແຕ່ຈະພິຈາລະນາອະໄພຈຸດອ່ອນແລະຂໍ້ຂາດຕົກບົກພ່ອງຂອງຂ້າພະເຈົ້າ. ຂ້າພະເຈົ້າ ເຊມຸຍແອນ ປິນ, ບ້ານເກີດເມືອງນອນຢູ່ທີ່ ແອຊູໂອເຣີ. ມື້ນີ້ ຮຸ່ງນະພາອາລຸນງາມແຫ່ງວັນທີ່ ໑໗ ເດືອນພຶດສະພາ ໑໘໙໘, ຂ້າພະເຈົ້າພໍດີມີອາຍຸບັນຈົບຄົບຮອບຫ້າສິບປີ, ຂ້າພະເຈົ້າຈຶ່ງລົງມືບັນລະຍາຍເຖິງເຫດການຕ່າງໆທີ່ຖືກຕ້ອງຕາມຄວາມເປັນຈິງນັ້ນຢ່າງລະອຽດຕາມຄວາມສາມາດຂອງຂ້າພະເຈົ້າເອງ.

ຂ້າພະເຈົ້າກຳເນີດເກີດມາ ໃນຂະນະທີ່ສົງຄາມໂລກຄັ້ງທີ່ຫນຶ່ງນໍ່ຈະສິ້ນສຸດລົງ, ຢູ່ ແອຊູໂອເຣີ ທີ່ເປັນເມືອງນ້ອຍໆທີ່ສະຫງົບງຽບເມືອງຫນຶ່ງ, ຕັ້ງຢູ່ຝັ່ງມະຫາສະຫມຸດອັດລັງຕິກ, ກໍກຳເນີດຢູ່ໃນຄອບຄົວ ອາຢີດ໌ ປິນ, ສະຫມຽນຜູ້ຫນຶ່ງໃນຫ້ອງການແຫ່ງພາສາດ ໂອນມາຂຶ້ນທີ່ເປັນກຳມະສິດຂອງທ່ານ ລໍເດີ* ປາກລິນເຕິນ.

ຂ້າພະເຈົ້າເປັນລູກຜູ້ສຸດທ້າຍ ແລະຜູ້ຫນຶ່ງຜູ້ດຽວເທົ່ານັ້ນທີ່ຍັງມີຊີວິດຢູ່ຂອງພໍ່ແມ່. ພວກ

---

* ລໍເດີ: ຕຳແຫນ່ງຫນຶ່ງທີ່ສູງສຸດໃນຊົນຊັ້ນຂຸນນາງອັງກິດ (ຜູ້ແປ)

ອ້າຍ, ພວກເອື້ອຍທີ່ເກີດກ່ອນຂ້າພະເຈົ້ານັ້ນ ລ້ວນແຕ່ຕາຍຕັ້ງແຕ່ຄາວຍັງອາຍຸອ່ອນໆ. ແນ່ນອນແລ້ວວ່າພໍ່ແມ່ຂ້າພະເຈົ້າຮັກແພງ "ລູກນ້ອຍ" ຂອງຕົນທີ່ສຸດ. ແມ່ຂອງຂ້າພະເຈົ້ານັ້ນອ່ອນເພຍ, ແລະພະຍາດປອດບວມໄດ້ປຸ້ນເອົາເພິ່ນໄປແຕ່ຄາວທີ່ຂ້າພະເຈົ້າຫາກໍຍ່າງເຂົ້າ ໕ ປີ. ບິດາຂ້າພະເຈົ້າແລະຂ້າພະເຈົ້າເອງຮ້ອງໄຫ້ຮ່ຳໄຮຢູ່ຢ່າງບໍ່ຢຸດບໍ່ເຊົາ ຕໍ່ ການສູນເສຍອັນເຈັບຊ້ຳນີ້.

ພໍ່ຂອງຂ້າພະເຈົ້າໄດ້ຄອງຄວາມເປັນພໍ່ຫມ້າຍທ້າຍຫັກຢູ່ໃນເຮືອນນ້ອຍຫລັງຫນຶ່ງ ໃກ້ກັບເດີ່ນຕະຫລາດ ພ້ອມດ້ວຍລຸງ ແຮັດຍີ, ອ້າຍຂອງແມ່ຂ້າພະເຈົ້າ, ເຊິ່ງແມ່ນຊາຍຊະລາທີ່ໂດດດ່ຽວປ່ຽວພອຍຜູ້ຫນຶ່ງ. ລຸງຂອງຂ້າພະເຈົ້າເປັນທະຫານຊັ້ນສອງ ຊຶ່ງມີຊື່ເອີ້ນເປັນທາງການວ່າແຮັດຍີນານ ບຣົງ ໄດ້ອອກກິນເບັ້ຍບຳນານແລ້ວ, ເພິ່ນຖືກລູກແຕກ ທຳໃຫ້ມີເບື້ອງຊ້າຍກຸດໃນປີ໑໙໑໕ ຢູ່ທີ່ ກາລີໂປລີ, ຍາມໃດກໍພູມໃຈຕິດຫລຽນໄຊ "ພິລະອາດຫານ" ຢູ່ເທິງເອິກແລະໄດ້ເລົ່າເລື່ອງມະຫັດສະຈັນໃຫ້ຂ້າພະເຈົ້າຟັງຫລາຍຢ່າງ. ບາງເທື່ອອາດແມ່ນຍ້ອນເລື່ອງຕ່າງໆເຫລົ່ານັ້ນທີ່ໄດ້ກໍ່ໃຫ້ເກີດຄວາມໃຝ່ຝັນອັນເລິກເຊິ່ງ ຂຶ້ນມາໃນໃຈຂອງຂ້າພະເຈົ້າໃຫ້ຢາກໄປສູ່ບັນດາປະເທດທີ່ມີອາກາດຮ້ອນຈັດ ເພື່ອຈະໄດ້ແນມເຫັນສິ່ງມະຫັດສະຈັນຕ່າງໆດ້ວຍຕາຕົນເອງ. ຄາວຍັງນ້ອຍ ຂ້າພະເຈົ້າບໍ່ໄດ້ຄຶດເອົາໄວ້ເລີຍວ່າ ຄວາມຈິງຍັງມະຫັດສະຈັນກ່ວາຕັ້ງຫລາຍໆເທົ່າ ຖ້າທຽບກັບການພະຈົນໄພຕ່າງໆທີ່ລຸງຂອງຂ້າພະເຈົ້າເຄີຍເລົ່າຄືນໃນລາຕີແຫ່ງລະດູຫນາວອັນຍືດເຍືອນ, ໃນຂະນະທີ່ເພິ່ນນັ່ງສູບຢາຢູ່ຕໍ່ຫນ້າແປວໄຟໃນເຕົານັ້ນ.

ຂ້າພະເຈົ້າຈື່ໄດ້ວ່າ ລຸງຂອງຂ້າພະເຈົ້າເຄີຍເລົ່າເຖິງກຳປັ່ນເຫລັ້ມຫນຶ່ງ. ກຳປັ່ນເຫລັ້ມນັ້ນໃຫຍ່ເຖິງຂັ້ນວ່າ, ເມື່ອມັນແລ່ນຜ່ານຊ່ອງທະເລ ດູວະເອີ ນັ້ນ, ຈອມແຫລມຂອງຫົວກຳປັ່ນຊົນກັບຈອມທາດຂອງເມືອງ ກາເລ ທີ່ຕັ້ງຢູ່ເທິງຝັ່ງທະເລຝະລັ່ງ, ສ່ວນຜືນທຸງທີ່ພວມໂບກສະບັດຢູ່ເທິງຫ້ອງຂັບນັ້ນ ໄດ້ໂບກປັດພັດເປົ່າຝູງແກະທີ່ພວມຍືນຢູ່ເທິງໂງ່ນຫີນ ດູວະເອີ ນັ້ນຈົນປິວລົງທະເລຫມົດ. ເສົາກະໂດງຂອງກຳປັ່ນເຫລັ້ມນີ້ສູງເຖິງຂັ້ນວ່າລູກເຮືອຫນຸ່ມນ້ອຍຜູ້ຫນຶ່ງປີນຂຶ້ນຮອດຈອມຂອງມັນ, ແລະເມື່ອເວລາຕະລູດລົງມາຮອດພື້ນກຳປັ່ນແລ້ວປະກົດວ່າລາວໄດ້ກາຍເປັນຊາຍຊະລາຜູ້ຫນຶ່ງທີ່ມີຫນວດຍາວລົງຈົນຈຳສາຍບື. ລຸງຂອງຂ້າພະເຈົ້າຍັງເລົ່າວ່າ ມີຄັ້ງຫນຶ່ງເພິ່ນໄປຍັງເກາະກາຣິບຽນດ້ວຍກຳປັ່ນນ້ອຍເຫລັ້ມຫນຶ່ງ, ກຳ

ປັ້ນຂອງເພິ່ນຈະຕ້ອງເລັດລອດໄປຕາມຫວ່າງເກາະຕ່າງໆ ເທິງຊ່ອງທະເລທີ່ແຄບເຖິງຂັ້ນສາມາດເດ່ມືໄປລູບໂງ່ນຫີນຢູ່ຣິມຝັ່ງຕາມສອງຟາກຂ້າງເຮືອນັ້ນໄດ້, ຍື່ນມືໄປລູບຄຳເງິນຄຳກໍາແກ້ວອັນມາກມາຍກ່າຍກອງ. ເພິ່ນຍັງເລົ່າເຖິງຊ່ອງທະເລ ບາລຳບັງດະຍັງ ເຊິ່ງເປັນເຫດໃຫ້ພາຍລຸນມາຂ້າພະເຈົ້າຊອກຄົ້ນຫາຢູ່ເທິງແຜນທີ່ພູມີສາດຢູ່ຕະຫລອດ ແຕ່ກໍ່ບໍ່ປະກົດເຫັນຢູ່ໃສເລີຍ. ຢູ່ເທິງຕົ້ນໄມ້ທີ່ປົ່ງຂຶ້ນຢູ່ສອງຣິມຝັ່ງແຫ່ງຊ່ອງທະເລນີ້ມີລີງຫລາຍທີ່ສຸດ, ຫລາຍເຖິງຂັ້ນວ່າເຂົາເຈົ້າບໍ່ສາມາດທີ່ຈະບັນຊາໃບລົມມັນໄດ້ອີກ: ຫາງລີງຍ່ອນລົງມາຊາບລາບ ແລະສິນລະວິນປົນເປກັບສາຍຈ່ອງໃບລົມໄປຫມົດ.

ໄດ້ຟັງເລື່ອງຕ່າງໆເຫລົ່ານັ້ນແລ້ວ, ຂ້າພະເຈົ້າໄດ້ປະຕິຍານກັບຕົນເອງວ່າ ຈັ່ງໃດກໍ່ຕ້ອງໃຫ້ໄດ້ເປັນນັກທັດສະນາຈອນຜູ້ຫນຶ່ງ.

ພາຍລຸນມາ, ນິໄສຕະລົກເຮຮາອັນຈິງໃຈຂອງລຸງຂ້າພະເຈົ້າ ກໍ່ຄ່ອຍໆຊຶມເຂົ້າໄປສູ່ວາດແຫ່ງຄວາມງຽບເຫງົາຊຶ່ງບໍ່ມີໃຜສາມາດເຂົ້າໃຈໄດ້. ຄາວຢູ່ທີ່ແອຊູໂອເຣີ, ເຂົາເຈົ້າກືລຸງຂ້າພະເຈົ້າເປັນຊາຍຊະລາຂີ້ຈົ່ມແລະມັກກຽງແບບບຸ່ປ່າບຸດົງຈົນເປັນຕາເບື່ອເອົາໂລດ. ໄດ້ຮັບເງິນສົງເຄາະຈາກສົງຄາມ, ລຸງຂອງຂ້າພະເຈົ້າໃຊ້ສ່ວນໃຫຍ່ຂອງເວລາໄວ້ກັບຮ້ານອາຫານ "ລາຊາເສືອ", ຢູ່ແຫ່ງນີ້ ເພິ່ນຄົບຄ້າສະມາຄົມຢ່າງຊຶ່ນກາຍສະບາຍອາລົມກັບອັນທີ່ເອີ້ນວ່າສັງຄົມຂອງກຸ່ມຂາປະຈຳ. ເຈົ້າຂອງຮ້ານອາຫານ "ລາຊາເສືອ", ທ່ານ ທ້ອມ ບຣິດ ຕາເສື້ອງ ຜູ້ເຊິ່ງຂຶ້ນຊື່ລືນາມວ່າເປັນລາຊາການພະນັນທີ່ບໍ່ມີໃຜສາມາດທຽມທັນໄດ້ໃນເຂດ ແອຊູໂອເຣີ. ເພິ່ນຜູ້ນັ້ນຍັງດັງໃນເລື່ອງອື່ນໆອີກ, ຊຶ່ງຂ້າພະເຈົ້າຈະກ່າວເຖິງໃນວາລະອັນໃກ້ໆນີ້ແລ້ວ.

ລຸງຂອງຂ້າພະເຈົ້າເຄີຍນັ່ງເຈົ່າຢູ່ທີ່ຮ້ານອາຫານ "ລາຊາເສືອ" ມາຕັ້ງແຕ່ເຊົ້າໆ, ເພິ່ນສູບຮົ່ມກອກ ເບຣຍີນໃຫຍ່ໆ, ຍັດຢາຍີ່ຫໍ້ "ສິງໂຕຈັກຂີນ" ເຊິ່ງເປັນຢາຊະນິດທີ່ມີລາຄາສື່ອັດຕໍ່ຫໍ່, ແລະຄ່ອຍໆດື່ມເຫລົ້າເບຍ ອາເລີ ເທື່ອລະກືນທີ່ບັນຈຸຢູ່ໃນໂຈກໃຫຍ່ ເຮັດດ້ວຍກົ່ວນັ້ນ ດ້ວຍວາດຂອງຜູ້ເຊິ່ງໄດ້ເຮັດວຽກທຳງານມາຢ່າງມາກມາຍກ່າຍກອງໃນຊີວິດຂອງຕົນແລະມາດຽວນີ້ມີສິດໃຊ້ຈຳນວນເງິນສົງເຄາະກ້ອນນ້ອຍໆນັ້ນຢ່າງບໍ່ຕ້ອງວິຕົກກັງວົນຫຍັງເລີຍ.

ມີຫລາຍຄັ້ງ, ເພິ່ນກັບບ້ານໃນຂະນະທີ່ເມົາສືຊຶມໆໄປແລ້ວ, ແລະຍອກຂ້າພະເຈົ້າໂດຍ

ເວົ້າວ່າ: "ບັກຫມີນ້ອຍບໍ່ທັນເລຍ", ເລື່ອງນີ້ເຮັດໃຫ້ຂ້າພະເຈົ້າຄຽດທີ່ສຸດ. "ຫມີນ້ອຍບໍ່ທັນເລຍ" ຫມາຍຄວາມວ່າ "ບັກອະສົມບູນຮູບ". ສຳນວນຄວາມເວົ້ານີ້ອອກມາຈາກຄວາມເຊື່ອຖືງົມງາຍອັນໂງ່ງ່າວຄືກ້າຫມີນ້ອຍທີ່ຫາກໍເກີດອອກມາ ໂດຍທີ່ບໍ່ທັນຖືກແມ່ມັນເລຍໃຫ້ແລ້ວນັ້ນແມ່ນຍັງບໍ່ທັນເປັນຮູບຮ່າງຂອງໂຕຫມີ. ແຕ່ໃສຂ້າພະເຈົ້າຈະອະສົມບູນຮູບ, ກ້າມຊີ້ນຕ່າງໆເທົ່າລຳແຂນທັງຄູ່ຂອງຂ້າພະເຈົ້າກໍຄືຂະຫຍາຍຕົວເຂັ້ມແຂງແຮງດີສົມຄວນຢູ່.

ຄັ້ງຫນຶ່ງ ຂ້າພະເຈົ້າໄດ້ໂຕ້ຖຽງກັບລຸງຂອງຂ້າພະເຈົ້າກ່ຽວກັບບັນຫານີ້ຢ່າງເຄັ່ງຄັດ, ເພິ່ນຂໍໂທດແລ້ວກໍບໍ່ໄດ້ຖືບເພິ່ນເວົ້າອີກຈັກເທື່ອ.

ພາຍຫລັງທີ່ແມ່ຂອງຂ້າພະເຈົ້າເສຍໄປ, ການລ້ຽງເກືອສັ່ງສອນຂ້າພະເຈົ້ານັ້ນກໍຕົກເປັນພາລະຂອງແມ່ເກົ້າ ໂອລີວີອາ ຜູ້ຮັບໃຊ້ ເພາະວ່ານັບທັງພໍ່ແລະລຸງຂອງຂ້າພະເຈົ້າລ້ວນແຕ່ບໍ່ມີເວລາຈະມາຫຍຸ້ງນຳວຽກນີ້. ເຖິງຈັ່ງໃດກໍດີ ຄວາມພະຍາຍາມຕ່າງໆໃນການສັ່ງສອນລ້ຽງເກືອຂ້າພະເຈົ້ານັ້ນ ກໍຍັງບໍ່ທັນເຖິງຂັ້ນພໍທີ່ຈະຖືໄດ້ວ່າເປັນການອົບຮົມສັ່ງສອນທີ່ພຽງພໍແລະຮອບດ້ານໄດ້. ໂອລີວີອາ ພຽງແຕ່ຕິດຕາມໃຫ້ຂ້າພະເຈົ້າກິນ, ດື່ມເປັນໂມງເວລາ, ສົ້ງເສື້ອຂອງຂ້າພະເຈົ້າຍາມໃດ ກໍເປັນລະບຽບຮຽບຮ້ອຍ. ບັນຫາຕ່າງໆເຫລົ່ານັ້ນ ມັນໄດ້ສອນໃຫ້ຂ້າພະເຈົ້າມີນິໄສຮອບຄອບດີເທົ່ານັ້ນ.

ຫລັງຈາກນັ້ນ, ຂ້າພະເຈົ້າກໍເລີ່ມເຂົ້າຮຽນຢູ່ທີ່ໂຮງຮຽນມັດທະຍົມຂອງແຂວງແລະໄດ້ຮັບສິດໃນການແກ້ໄຂທຸກວຽກງານຂອງຕົນດ້ວຍຕົນເອງ.

ກ່ອນຫນ້ານີ້, ໃນເຂດຊານເມືອງ ແອຊູໂອເອີ ນັ້ນ, ເຂົາເຈົ້າຂຸດຄົ້ນກ່ານ, ແຕ່ມາເຖິງສະໄຫມຂອງຂ້າພະເຈົ້າ, ບໍ່ກ່ານຕ່າງໆຖືກປະຮ້າງ ເພາະແຫລ່ງແຮ່ກ່ານໄດ້ບົກແຫ້ງລົງແລ້ວ. ພວກເດັກນ້ອຍຢູ່ ແອຊູໂອເອີ, ໃນນັ້ນ ມີຂ້າພະເຈົ້າ ແລະເພື່ອນຂອງຂ້າພະເຈົ້າຄື: ແອເດີ, ລູກຊາຍຂອງເຈົ້າຂອງຮ້ານຂາຍຢາ ອົກພີ, ເຄີຍຫລີ້ນດັ້ງດ້ວຍການປີນຂຶ້ນໆລົງໆແລະຫາຈັບເຈຍຢູ່ໃນບໍ່ກ່ານເກົ່າຕ່າງໆເຫລົ່ານັ້ນ. ເລື່ອງນີ້ຍັງເປັນສິ່ງຕິດອົກຕິດໃຈກ່ວາການໄປທີ່ໂບດຄຸນພໍ່ກັບແມ່ເກົ້າ ໂອລີວີອາໃນວັນທິດຕ່າງໆ ເພື່ອຮັບຟັງ ສັງຄະປະທານ ອີແອເຣມີອາ ອ່ານບົດເທສະຫນາ ເຊິ່ງຂ້າພະເຈົ້າບໍ່ເຂົ້າໃຈຈັກຫນ້ອຍເລີຍ. ໃນເລື້ອງນີ້, ລຸງ ແຮັດຍີ ຍືນຢູ່ຝ່າຍຂ້າພະເຈົ້າຢ່າງຂາດຂັ້ນ, ເພິ່ນຊີ້ແຈງໃຫ້ແມ່ເກົ້າ ໂອລີວີອາ ເຫັນວ່າ

ສຳລັບເດັກນ້ອຍອາຍຸຮຸ່ນຂອງຂ້າພະເຈົ້ານັ້ນ, ການໄປທ່ອງຫລິ້ນຢູ່ທາງນອກຍັງມີຜົນກວ່າຄຳເທສະຫນາຂອງພະສັງຄະປະທານ ອີແອເຣມີອາ. ແນ່ນອນແລ້ວວ່າ ຂ້າພະເຈົ້າສະຫນັບສະຫນູນຄວາມຄິດເຫັນຂອງລຸງຂ້າພະເຈົ້າຢ່າງຂາດຂັ້ນ.

ເມື່ອແນມເບິ່ງຈາກຫໍຄອຍຂອງໂບດຈະສາມາດແນມເຫັນທັດສະນີຍະພາບອັນງາມວິຈິດຂອງບັນດາຫນ່ວຍພູທີ່ອ້ອມລ້ອມເອົາຕົວເມືອງ ແອຊູໂອເຣີ ແລະເພີຍພາບທະເລອັນກວ້າງໄກໄພສານອອກມາ. ບັນດາຈອມທາດສີຂາວຫມົ່ນຂອງຜາສາດໂອນມາອຸນ ພຸ່ງພົ້ນຂຶ້ນມາຢ່າງງົດງາມຢູ່ເທິງພື້ນພົງແຫ່ງປ່າ ປາຕຣິກ ທີ່ປົກຫຸ້ມເອົາຈອມພູຕ່າງໆນັ້ນໄວ້. ຢູ່ເບື້ອງລຸ່ມຂອງເມືອງແອຊູໂອເຣີ, ເມື່ອຂ້າມເສັ້ນທາງລາດຢາງທີ່ໄປສູ່ຕົວເມືອງນ້ອຍ ເວສະລີ ນັ້ນແລ້ວກໍຈະໄປເຖິງ ຜາດອກກຸຫລາບຄູ່. ຢູ່ທາງເທິງຂອງຜານີ້ ມີທົ່ງພຽງນ້ອຍຕອນຫນຶ່ງ, ຈາກແຫ່ງນີ້ຈະສາມາດແນມເຫັນຝັ່ງທະເລທັງສອງເບື້ອງ. ຢູ່ເລິກເຂົ້າໄປທາງດ້ານຫລັງຂອງທົ່ງພຽງນັ້ນແມ່ນບໍ່ກ່ານຮ້າງທີ່ເປັນຫນ້າສົນໃຈທີ່ສຸດ, ໃນນັ້ນ ມີບໍ່ "ງວງຍາວ" ເຊິ່ງເປັນບໍ່ທີ່ຂຶ້ນຊື່ລືນາມຍ້ອນຄວາມເລິກລັບແລະສຽວສະຫຍອງ, ມີແຕ່ຄົນຜູ້ເຊິ່ງມີຄວາມອາດຫານເປັນພິເສດເທົ່ານັ້ນ ຈຶ່ງຈະກ້າຫມົ້ນຫົວລົງໄປແຫ່ງນັ້ນ. ແອເດີ ເຄີຍຂີ່ໂມ້ເຖິງຜົນງານອັນພິສະດານນີ້ຂອງມັນ. ສ່ວນຂ້າພະເຈົ້າຍັງບໍ່ໄດ້ໄປເຖິງແຫ່ງນັ້ນຈັກເທື່ອ. ຫົນທາງໄປສູ່ບໍ່ "ງວງຍາວ" ບໍ່ແມ່ນມັນຈະໃກ້ໆເລີຍ. ແຕ່ແລ້ວຂ້າພະເຈົ້າກໍຍັງຫວັງສະເຫມີທີ່ຢາກຈະຫມົ້ນລົງໄປໃນບໍ່ແຫ່ງນັ້ນ ເພື່ອຈະໄດ້ຢືນຢັນວ່າມັນມີພົ້ນຫລືບໍ່?

ໃນຂະນະທີ່ພວມປີນພູຢູ່ນັ້ນ, ຂ້າພະເຈົ້າໄດ້ຄຶດວາດພາບເຖິງຕອນທີ່ຂ້າພະເຈົ້າໄດ້ເຕີບໃຫຍ່ຂຶ້ນແລ້ວ ແລະໄດ້ເດີນທາງໄປທັດສະນາຈອນໃນພາກມະຫາສະຫມຸດທີ່ກວ້າງໄກເບື້ອງພຸ້ນ. ນອກຈາກເລື່ອງຕ່າງໆທີ່ລຸງຂອງຂ້າພະເຈົ້າເລົ່າແລ້ວນັ້ນ, ການອ່ານປຶ້ມເຫລັ້ມຕ່າງໆທີ່ວາດເວົ້າເຖິງບັນດາປະເທດຊາດທີ່ແປກປະຫລາດຫ່າງໄກກໍຍັງຊວນໃຫ້ຂ້າພະເຈົ້າ ເກີດມີຄວາມຄິດດັ່ງກ່າວຂຶ້ນມາເຊັ່ນກັນ.

ຂ້າພະເຈົ້າມີຄວາມຮູ້ສຶກອິດສາຕາຮ້ອນກັບເຈົ້າຂອງຜາສາດ ໂອນມາອຸນ, ເຊິ່ງບໍ່ມີລະດູໃບໄມ້ຫລົ່ນໃດ ທີ່ເພິ່ນບໍ່ອອກເດີນທາງໄປທັດສະນາຈອນຮອບໂລກ! ຕາມປົກກະຕິແລ້ວ, ເມື່ອຮອດລະດູບານໃຫມ່ ທ່ານ ລໍເດີ ປາກລິນເຕີນ ກໍກັບຄືນມາໃຊ້ຊີວິດຢູ່ຢ່າງໂດດດ່ຽວ

ປ່ງວກາຍທີ່ຜາສາດ ໂອນມາຊຸນຂອງເພິ່ນ. ຂ້າພະເຈົ້າຍັງບໍ່ທັນໄດ້ແນມເຫັນເພິ່ນຜູ້ນັ້ນຈັກເທື່ອ, ສ່ວນພໍ່ຂອງຂ້າພະເຈົ້ານັ້ນຄ້າຍຄືກັບເພິ່ນບໍ່ຢາກເລົ່າເຖິງນາຍຂອງຕົນເລີຍ, ເຖິງແມ່ນວ່າໄດ້ພົບກັບເພິ່ນຜູ້ນັ້ນຢູ່ເປັນປົກກະຕິ ແລະທັງຍັງຮູ້ຈັກວຽກງານທຸກຢ່າງຢູ່ຜາສາດ ໂອນມາຊຸນ ໄດ້ຢ່າງລະອຽດລະອໍ. ເຂົາເຈົ້າອາດຈະຮັບຮູ້ພຽງແຕ່ວ່າ ທ່ານ ລໍເດີ ປາກລິນເຕິນ ຄົ້ນຄວ້າທາງວິທະຍາສາດແລະມີພຶດຕິການອັນດີເລີດຕໍ່ບັນດາຜູ້ຊ່ວຍງານຂອງເພິ່ນ, ຮູ້ວ່າຄົນຈຳນວນຫນຶ່ງຢູ່ ແອຊູໂອເຣີ ຖືສິ່ງນັ້ນ ເປັນເລື່ອງພິດສະດານ.

ເມື່ອຂ້າພະເຈົ້າສຳເລັດການສຶກສາຊັ້ນປະຖົມບໍລິບູນແລ້ວ, ພໍ່ຂອງຂ້າພະເຈົ້າໄດ້ສົ່ງຂ້າພະເຈົ້າເຂົ້າຮຽນຢູ່ວິທະຍາໄລດີຍັງ ຕໍ່ຫນ້າຄວາມແຕກຕື່ນຂອງຄົນທົ່ວໄປ, ເພາະໃຜໆກໍ່ຮູ້ດີວ່າມີແຕ່ລູກຫລານຂອງຄອບຄົວທີ່ຮັ່ງມີເທົ່ານັ້ນ ຈຶ່ງໄດ້ໄປຮຽນຢູ່ແຫ່ງນັ້ນ. ຂ້າພະເຈົ້າມີສິ່ງນັ້ນຂຶ້ນມາໄດ້ ກໍ່ຍ້ອນອາໄສບາລະມີຂອງທ່ານ ລໍເດີ ປາກລິນເຕິນ. ເພິ່ນໄດ້ເອົາເງິນຈຳນວນຫນຶ່ງທີ່ຈຳເປັນແລະໃບສະເຫນີໃຫ້ແກ່ຂ້າພະເຈົ້າ. ຫນັງສືສະບັບນັ້ນ ມີອຳນາດພຽງພໍຢ່າງສົມບູນ ທີ່ຈະຢຸດຕິການຊັບຊິບສອດແສດໃນວົງການພວກນັກຮຽນກ່ຽວກັບຊື່ແລະນາມສະກຸນທີ່ບໍ່ຢູ່ໃນວົງການຊັ້ນສູງຈັກຫນ້ອຍເລີຍຂອງຂ້າພະເຈົ້າ. ຍິ່ງໄປກ່ວານັ້ນ, ຂ້າພະເຈົ້າຍັງມີເພື່ອນຝູງຫລາຍຄົນໃນຫ້ອງຮຽນ ທີ່ຕິດອົກຕິດໃຈໃນຜົນງານຂອງຂ້າພະເຈົ້າທາງດ້ານລອຍນ້ຳ, ຕີມວຍແລະບານເຕະ. ໃນໂອກາດພັກແລ້ງຕ່າງໆ ຂ້າພະເຈົ້າກັບມາຍັງ ແອຊູໂອ - ເຣີ ພຽງໄລຍະສັ້ນໆ, ເພາະວ່າໃນກຸ່ມເພື່ອນຝູງຂອງຂ້າພະເຈົ້ານັ້ນ ມີ ໂຣເບີດ ສະມິນ ຊຶ່ງເຄີຍເຊີນຂ້າພະເຈົ້າໄປທີ່ຄະລືຫາດ ຂອງພໍ່ລາວ, ຢູ່ແຫ່ງນັ້ນ ຂ້າພະເຈົ້າໄດ້ໃຊ້ເວລາຢ່າງເຕັມປ່ຽມດ້ວຍຄວາມພໍອົກພໍໃຈ. ໃກ້ຈະຮອດບຸນປີໃຫມ່ປະຈຳຊາດຂ້າພະເຈົ້າເຄີຍສົ່ງບັດອວຍພອນໄປຍັງຜູ້ອຸປະກາລະຂອງຂ້າພະເຈົ້າໃຫ້ເພິ່ນຮັບນຳ. ກ່ຽວກັບບັນຫານີ້ ຍາມໃດພໍ່ຂອງຂ້າພະເຈົ້າກໍ່ຕອບມາວ່າ: "ທ່ານຜູ້ໃຫຍ່ ຂອບໃຈຕໍ່ຄຳອວຍພອນຂອງລູກ ແລະຫວັງວ່າລູກຈະກ້າວຫນ້າກວ່າເກົ່າ".

ນັບແຕ່ປີທີ່ສາມຂຶ້ນໄປ, ຂ້າພະເຈົ້າຮູ້ສຶກຕິດອົກຕິດໃຈກັບຊີວະສາດ ແລະພຶກສາສາດ. ຂ້າພະເຈົ້າຖືວ່າ ວິຊາວິທະຍາສາດດັ່ງກ່າວຈະມີຜົນປະໂຫຍດຕໍ່ການທັດສະນາຈອນຕ່າງໆໃນພາຍຫນ້ານີ້ ແລະຈະຖືວ່າເປັນເລື່ອງພໍອົກພໍໃຈທີ່ສຸດ ຖ້າຫາກຄົ້ນພົບການຄິດປະດິດສ້າງອັນ

ໃດອັນຫນຶ່ງຂຶ້ນມາໃນຊຸມພຶກສາຊາດ ທີ່ຫາຍາກ ເຊິ່ງເກີດຢູ່ໃນປ່າດົງພົງພະນອມອັນຕຶບຫນາຂອງເຂດອາກາດຮ້ອນຈັດເຊິ່ງຂ້າພະເຈົ້າໄດ້ສາບານເອົາໄວ້ວ່າ ຈັ່ງໃດກໍຕ້ອງໄປທັດສະນາຈອນຢູ່ແຫ່ງຕ່າງໆເຫລົ່ານັ້ນໃຫ້ໄດ້.

ຂ້າພະເຈົ້າແລະ ໂຣເບີດ ໄດ້ພ້ອມກັນສ້າງແຜນການຕ່າງໆທີ່ພິດປົກກະຕິທີ່ສຸດຂຶ້ນມາ ແລະພໍ່ລາວທີ່ເປັນນັກການຄ້າທີ່ມີຊື່ສຽງດາງດັງຜູ້ຫນຶ່ງໄດ້ໃຫ້ຄໍາຫມັ້ນສັນຍາ ກັບພວກຂ້າພະເຈົ້າວ່າຈະໃຫ້ໄປທັດສະນາຈອນໃນເຂດພູມີພາກທະເລ ເມດີແຕລາເນ ທັນທີ ເມື່ອໃດພວກຂ້າພະເຈົ້າຫາກຈະເລີນໄວ.

## II

ເມື່ອເປັນບ່າວແວງອາຍຸ ໑໖, ຂ້າພະເຈົ້າກໍຈົບວິທະຍາໄລຊັ້ນຕົ້ນ ພ້ອມດ້ວຍຄໍາສັງເກດຍ້ອງຍໍແລະໄດ້ຮັບໃບປະກາສະນີຍະບັດ, ໃນນັ້ນລາຍເຊັນຕ່າງໆຂອງຜູ້ອໍານວຍການ ແລະອາຈານສອນທີ່ລົງນາມໄວ້ກ້ອງເຄື່ອງຫມາຍອັນງົດງາມຂອງລາຊະອານາຈັກນັ້ນ ໄດ້ຢືນຢັນວ່າຂ້າພະເຈົ້າມີຄວາມຮັບຮູ້ຢ່າງຄົບກ້ວນ ກ່ຽວກັບປະຫວັດສາດຂອງລາຊະອານາຈັກ, ກ່ຽວກັບພູມີສາດ, ເຄມີສາດຂັ້ນພື້ນຖານ, ຊີວະສາດ, ພຶກສາສາດແລະຂະແຫນງວິທະຍາສາດອື່ນໆ. ຕາປະທັບໃຫຍ່ໆ, ມີຮູບສິງໂຕສີຄໍານັ້ນໄດ້ເຮັດໃຫ້ໃບປະກາສະນີຍະບັດຂອງຂ້າພະເຈົ້າມີຄວາມຫມັ້ນຄົງທະນົງຕົວຂຶ້ນຕື່ມ, ແລະຂ້າພະເຈົ້າກໍລ່ຳໆແຍງໆຫນັງສືຢັ້ງຢືນທີ່ເປັນພຽງລັກສະນະປະຫວັດສາດຂອງຂ້າພະເຈົ້ານັ້ນບໍ່ຈັກວ່າເທົ່າໃດເທື່ອ, ທັງແພງ, ຂ້າພະເຈົ້າທັງອ່ານຕົວຫນັງສືລາຕິນທີ່ຂຽນອ້ອມໄວ້ກັບຫົວສິງໂຕໃນຕາປະທັບນັ້ນ: "ແນັບຕູນ* ຈົ່ງປົກປັກຮັກສາຊາວກະລາສີເຮືອ" - ນີ້ແມ່ນຄໍາຂວັນບູຮານບົດຫນຶ່ງແຕ່ສະໄຫມໂຣມັນບູຮານເຊິ່ງຍັງຄົງໄດ້ຮັບການຮັກສາໄວ້ໃນເຄື່ອງຫມາຍແຫ່ງດີຍັງຕາມມູນເຊື້ອຂອງມັນ.

ບົນເສັ້ນທາງກັບສູ່ເມືອງ ແອຊູໂອເອີ ນັ້ນ, ຂ້າພະເຈົ້າໄດ້ແວະຢາມບ້ານຂອງ ໂຣເບີດສອງສາມມື້, ພວກຂ້າພະເຈົ້າໄດ້ນັດກັນວ່າ ອີກເດືອນຫນຶ່ງຈະເດີນທາງອອກໄປທັດສະ

---

* ແນັບຕູນ: ເຈົ້າສະຫມຸດ (ຜູ້ແປ)

ນາຈອນຕາມຄຳທີ່ພໍ່ຂອງ ໂຣເບີດ ໄດ້ສັນຍາໄວ້ກັບພວກຂ້າພະເຈົ້າ ແຕ່ຫວ່າງເຫີງພຸ້ນ. ພວກຂ້າພະເຈົ້າກະວ່າຈະໄປຍັງເມຍາມ ຣີວີແອ ແລະຈະຢູ່ທີ່ຊະວິດເຊແລນໄລຍະຫນຶ່ງ. ຂ້າພະເຈົ້າສ້າງຄວາມຫວັງເອົາໄວ້ວ່າພໍ່ຂອງຕົນຈະເອົາເງິນຈຳນວນກນຶ່ງທີ່ຈຳເປັນມອບໃຫ້ແກ່ຂ້າພະເຈົ້າໃນການໄປຄັ້ງນີ້.

ຂ້າພະເຈົ້າກັບຄືນສູ່ເມືອງ ແອຊູໂອເອີ ດ້ວຍຄວາມສຸກທີ່ພວມປ່ຽມລົ້ນຢູ່ໃນຫມາກຫົວໃຈ. ສຳເລັດການສຶກສາຊັ້ນເອກຢູ່ໂຮງຮຽນມັດທະຍົມດີຢ່າງນັ້ນມັນບໍ່ແມ່ນເລື່ອງຫລິ້ນໆ! ຢູ່ທີ່ທ່າກຳປັ່ນ, ຂ້າພະເຈົ້າໄດ້ສົ່ງເຄື່ອງຂອງຂອງຕົນເມືອເຮືອນກ່ອນ, ສ່ວນຂ້າພະເຈົ້າໄດ້ເລີ່ມຍ່າງມາຕາມກະຫນົນຄົງ ຂ້າພະເຈົ້າຢາກລ່ຳແຍງດົວເມືອງແຫ່ງບ້ານເກີດເມືອງນອນຂອງຕົນ. ເພາະວ່າເປັນເວລາຫນຶ່ງປີເຕັມແລ້ວທີ່ຂ້າພະເຈົ້າບໍ່ໄດ້ມາແຫ່ງນີ້.

ແມ່ເຖົ້າ ໂອລີວີອາ ຄອຍຕ້ອນຮັບຂ້າພະເຈົ້າຢູ່ເຮືອນ.

-ສະບາຍດີຫລານ ເຊມຸຍແອນ. -ແມ່ເຖົ້າເວົ້າຢ່າງງ່າຍດາຍດ້ວຍນ້ຳສຽງຂອງຜູ້ເຄີຍໄດ້ລັ້ງເຫລືອເກືອອິ່ມ. -ທ່ານ ປີນໄດ້ຮັບໂທລະເລກຂອງຫລານແລ້ວ, ເພິ່ນກຽມໄປຕ້ອນຫລານແຕ່ວ່າເຊົ້າມື້ນີ້ ທ່ານ ລໍເດີໄດ້ຮຽກເພິ່ນໄປທີ່ພາສາດ.

-ມີເລື່ອງຫຍັງບໍແມ່ເຖົ້າ?

-ແມ່ເຖົ້າບໍ່ຮູ້, ລຸງ ແຮັດຍີ ກໍໄປເພື່ອຈະສືບສາວເລື່ອງລາວຈາກທ່ານ ບຣິດ.

-ຄັນຊັ້ນຫມາຍຄວາມວ່າ ມີເລື່ອງໃດເລື່ອງຫນຶ່ງເກີດຂຶ້ນແລ້ວ, -ຂ້າພະເຈົ້າເວົ້າອອກມາແລະກ້າວເຂົ້າໄປໃນຫ້ອງທີ່ຈັດແຈງໄວ້ໃຫ້ຂ້າພະເຈົ້າ. -ອາດມີເລື່ອງທີ່ພົວພັນເຖິງທ່ານລໍເດີປາກລີນເຕີນ ແມ່ນບໍ່ແມ່ເຖົ້າ? -ຂ້າພະເຈົ້າຖາມແມ່ເຖົ້າ ໂອລີວີອາ ເຊິ່ງຂະນະນັ້ນພວມແກ້ເສື້ອກັນຝົນຊ່ວຍຂ້າພະເຈົ້າຢູ່.

-ຄືຊິແມ່ນ, -ແມ່ເຖົ້າ ໂອລີວີອາ ຕອບ. -ແລ້ວຫລານຈະຮູ້ແຈ້ງທຸກຢ່າງດອກ. ທ່ານປີນບອກວ່າ ໃຫ້ຫລານໂທຫາເພິ່ນ. ໂທລະສັບອັດຕະໂນມັດຢູ່ແຈກະຫນົນຫັ້ນເດ. ທ່ານປີນຈະດີໃຈທີ່ສຸດທີ່ໄດ້ຍິນສຽງເວົ້າຂອງຫລານ. ປະຈຸບັນນີ້ ແມ່ເຖົ້າຊິຈັດແຈງອາຫານເຊົ້າກັບກາເຟກ່ອນ.

ຂ້າພະເຈົ້າພະຍາຍາມລົມໂທລະສັບກັບ ໂອນນາອູນຕັ້ງຫລາຍເທື່ອ ແຕ່ກໍໄຮ້ປະໂຫຍດ. ໃນທີ່ສຸດຍິງພະນັກງານໂທລະສັບຜູ້ຫນຶ່ງກໍເວົ້າມາວ່າ:

- ຈັກເພ, ລົມບໍ່ໄດ້.

ຂ້າພະເຈົ້າຕັດສິນໃຈໄປຍັງພາສາດນັ້ນເພື່ອພົບພໍ່, ຂ້າພະເຈົ້າເລີ່ມມີຄວາມເປັນຫ່ວງ ຍ້ອນຄວາມກັງວົນທີ່ບໍ່ຈະບໍ່ແຈ້ງອັນໃດອັນຫນຶ່ງ. ຄິວລົດຕັກຊີຢູ່ທີ່ກະຫນົນ ຄິງ ນັ້ນເອງ. ແຕ່ຂ້າພະເຈົ້າກໍຕັດສິນໃຈຍ່າງໄປຕາມເສັ້ນທາງທີ່ສັ້ນທີ່ສຸດ, ແລະປະຈຸບັນນີ້, ຄ້າຍຄືວ່າ ບັນດາກະຫນົນຫົນທາງອັນເປິະເປື້ອນຂອງເມືອງ ແອຊູໂອເອີໄດ້ເຮັດໃຫ້ຈິດໃຈຂອງຂ້າພະເຈົ້າເກີດຄວາມຫງ່ວມເຫງົາຂຶ້ນມາຢ່າງຍິ່ງ. ມີເລື່ອງຫຍັງເກີດຂຶ້ນຢູ່ ໂອນນາອູນ ນໍ? ບໍ່ເຂົ້າໃຈເລີຍວ່າຍ້ອນຫຍັງຂ້າພະເຈົ້າຈຶ່ງເຊື່ອວ່າໄພພິບັດໄດ້ມາເຖິງພໍ່ຂອງຂ້າພະເຈົ້າແລ້ວ. ຍ່າງຕາມຮ່ອມແຄບ ຄົດງໍງໍນັ້ນ, ຂ້າພະເຈົ້າກໍໄປເຖິງຄຸ້ມ ຍົນດະຍີເອ, ຢູ່ແຫ່ງນັ້ນຮ້ານອາຫານ "ເຈົ້າສະຫມຸດ" ແລະ ຮ້ານອາຫານ"ລາຊາເສືອ" ຕັ້ງຢູ່ເຊິ່ງຫນ້າກັນ, ທັງສອງຮ້ານລ້ວນແຕ່ຂຶ້ນຊື່ລືນາມຢູ່ໃນປະຫວັດສາດແຫ່ງເມືອງແອຊູໂອເອີ. ຂ້າພະເຈົ້າຢຸດຢູ່ຄາວຫນຶ່ງທີ່ປະຕູປ່ອງຍ້ຽມຂອງຮ້ານອາຫານ "ລາຊາເສືອ". ດັງກ້ອງອອກມາແຕ່ເບື້ອງໃນນັ້ນແມ່ນສຽງກຶກກຽງກັນຕ່າງໆນາໆ. ກຸ່ມຄວັນຢາສູບລອຍອອກມາຈາກປະຕູປ່ອງລົມປານວ່າຄວັນແຫ່ງອັກຄີໄພ. ສິ່ງນີ້ຫມາຍຄວາມວ່າ ລຸງແຮ້ດຢີ ຢູ່ທັ້ນແລະພວມສູບກອກຂອງເພິ່ນ. ຂ້າພະເຈົ້າກ້າວເຂົ້າໄປ. ໃນຮ້ານອາຫານ, ບໍ່ມີໃຜສົນໃຈນຳຂ້າພະເຈົ້າເລີຍ. ໃຜໆກໍເອົາໃຈໃສ່ຢູ່ກັບລຸງຂອງຂ້າພະເຈົ້າເຊິ່ງຂະນະນັ້ນເພິ່ນພວມພົ່ນຄວັນອອກມາຄືກັບປາກພູໄຟແລະພວມໂຕ້ຄາລົມຢູ່ຢ່າງເມົາມົວ:

- ຕໍ່ສະເພາະພວກເຮົາແລ້ວ, ບັນຫານັ້ນເກີດຂຶ້ນມາບໍ່ແມ່ນວ່າຈະຜ່ານໄປຢ່າງງ່າຍດາຍ. ຍັງຈະມີຍາມທີ່ພວກທ່ານຈະຄິດເຖິງອີຕາເຖົ້າແຮ້ດຢີ ແລະຢືນຢັນວ່າເຖົ້ານັ້ນເວົ້າຖືກຕ້ອງ. ມີຫລາຍບ່ອນພວມມີການສູ້ຮົບຕົບຕີກັນ, ເຂົາເຈົ້າຕີກັນຢູ່ທະວີບອາຟະລິກກາ, ຢູ່ຈີນ.

ໂດຍຜ່ານຄຳເວົ້າຂອງລຸງຂ້າພະເຈົ້າ, ພໍຈະເຂົ້າໃຈໄດ້ວ່າ ເຂົາເຈົ້າພວມໂຕ້ຖຽງກັນເຖິງແຫ່ງຕ່າງໆທີ່ພວມມີການສູ້ຮົບຕົບຕ່ອຍກັນຢູ່.

- ຖ້າພວກເຮົາບໍ່ຢາກໃຫ້ມີການປະທະກັນຂຶ້ນຢູ່ອ່າວ ແອຊູໂອເອີ ນີ້ແລ້ວ ພວກເຮົາກໍຕ້ອງປັບປຸງນະໂຍບາຍການຕ່າງປະເທດເຮົາ, ຂ້າພະເຈົ້າຄິດວ່າ ທ່ານນາຍົກຂອງພວກເຮົາຈະ

ຕ້ອງປ່ຽນແປງຄັນຮົ່ມ ... ຄັນຮົ່ມທີ່ເພິ່ນກືໄປບິນເສັ້ນທາງການຕ່າງປະເທດໃນປະຈຸບັນນີ້ຈະບໍ່ກໍ່ຄວາມປະທັບໃຈອັນເປັນມິ່ງຄຸນຫຍັງໄວ້ຢູ່ຕ່າງປະເທດ.

ທ່ານ ທ້ອມ ບຣິດ ຕາເສື້ອງທີ່ພວມລິນວິສະກີລົງໃສ່ຈອກນ້ອຍຢູ່ທາງຫລັງໂຕະວາງເຄື່ອງຂາຍນັ້ນເວົ້າຕັດບົດລຸງຂອງຂ້າພະເຈົ້າ:

- ຖືກຕ້ອງທີ່ສຸດ, ແຕ່ມື້ວານນີ້ນາຍຊ່າງບໍ່ແຮ່ ເວສະລີສອງຄົນ, ເຂົາເຈົ້າກໍນັ່ງຢູ່ບ່ອນທ່ານພວມນັ່ງຢູ່ນັ້ນແລ້ວ, ເພື່ອນເອີຍ, - ຍັງຫວງໃຫ້ມີການປ່ຽນຮອດນາຍົກພຸ້ນບໍ່ໃຊ່ຊື່ວ່າໃຫ້ປ່ຽນຄັນຮົ່ມລ້າງ...

ບັນດາຂາປະຈຳຂອງເຂົາຫົວແຕກໂຄບ, ຂ້າພະເຈົ້າກໍຫົວເຊິ່ງໃນເວລານັ້ນເອງທີ່ທ່ານ ທ້ອມ ບຣິດ ໄດ້ແນມເຫັນຂ້າພະເຈົ້າ.

- ເຊີນເຂົ້າມາພໍ້ອາດຍາເອີຍ. ເບິ່ງພຸ້ນທ່ານ ແຮັດຢີ, ຫລານຂອງທ່ານຕ້ອງການພົບທ່ານໃດຫັ້ນ.

ລຸງຂອງຂ້າພະເຈົ້າງວາກມາ.

- ເຊນຸຍແອນ! ...

ພວກຂ້າພະເຈົ້າຈັບມືກັນແໜ້ນໆ. ບັນດາຂາປະຈຳຂອງຮ້ານອາຫານແນມເບິ່ງຂ້າພະເຈົ້າຢ່າງຈິດຈໍ່. ຂ້າພະເຈົ້າເຫັນຄົນໜຶ່ງໃນກຸ່ມເຂົາເຈົ້ານັ້ນ ຈຸ້ຍຄາງມາທາງຂ້າພະເຈົ້າຢ່າງຂາດມາລະຍາດແລະ ພຶມພຳ:

- ຈະມີເລື່ອງແປກປະຫລາດເກີດຂຶ້ນຢ່າງໜຶ່ງກ້າທຸກສິ່ງທຸກຢ່າງປະກົດເປັນຈິງ... ບ່າວນ້ອຍໜ້າສິ່ງສານ...

ທ່ານ ບຣິດອອກຈາກຮ້ານວາງເຄື່ອງຂາຍແລະຍ່າງມາໃກ້ຂ້າພະເຈົ້າ.

- ເຊນຸຍແອນ, ດຽວນີ້ຫລານກາຍເປັນອ້າຍບ່າວນ້ອຍທີ່ເຈົ້າຊູ້ທີ່ສຸດ ເກືອງຂັ້ນວ່າລຸງບໍ່ຢາກຈະເຊື່ອສາຍຕາຂອງຕົນເອງເລີຍ. ຫລານຄືອາດຍານ້ອຍແທ້ງເດ...

- ແຕ່ເລື່ອງນີ້ບໍ່ສາມາດສະກັດກັ້ນຫລານບໍ່ໃຫ້ທັກທາຍກັບລຸງຢ່າງສະນິດສະໜົມໄດ້, ລຸງບຣິດທີ່ຮັກແພງເອີຍ, - ຂ້າພະເຈົ້າເວົ້າແລະເດ່ມືມາໃຫ້ເຈົ້າຂອງຮ້ານອາຫານ.

- ຮາ-ຮາ! - ທ່ານ ບຣິດຫົວດ້ວຍນ້ຳສຽງສຳນຽງຕ່ຳ ແລະຕົບອົ້ງມືຂອງຂ້າພະເຈົ້າບາດ

- ຄົນຊັ້ນມີເລື່ອງຫຍັງ, ລຸງຊິເວົ້າບໍ່ລະ?

- ເວົ້າແລ້ວລຸງກໍບໍ່ໃສ່ຊິຮູ້ຫຍັງນ່າ ລໍຖ້າໃຫ້ພໍ່ຫລານກັບມາກ່ອນດີ...

ໂດຍບໍ່ເອົາຫົວຊາບຳຄວາມເວົ້າຂອງລຸງເລີຍ, ຂ້າພະເຈົ້າແລ່ນອອກມາທີ່ໃຈກາງຄຸ້ມ. ເບື້ອງຫລັງຂອງແຈຄຸ້ມແມ່ນຄິວລົດຕັກຊີ. ອີກຊາວນາທີເທົ່ານັ້ນ ຂ້າພະເຈົ້າກໍຈະໄດ້ພົບພໍ່ ແລະຈະຮູ້ເລື່ອງທັງຫມົດ.

ຮ້ານຂາຍຢາທີ່ຂ້າພະເຈົ້າແສນຄຸ້ນເຄີຍນັ້ນຢູ່ຫັ້ນແລ້ວ, ບັນດາກະປຸກແກ້ວໃຫຍ່ບັນຈຸແອັດໄປດ້ວຍພວກທາດແຫລວນາໆສີທີ່ຕັ້ງລຽນກັນຢູ່ເທິງປະຕູປ່ອງຢ້ຽມນັ້ນ ພວມສະທ້ອນເປັນແສງຮຸ່ງກິນນ້ຳຢູ່ພາຍໃຕ້ແສງແດດຂອງດວງສຸລິຍາແຫ່ງເມືອງ ແອຊູໂອເອີ. ນະທີ່ນີ້ເຂົາເຈົ້າຍັງເຫັນຢາຕິດພື້ນເມືອງ, ຢາປົວແປ້ວດ້ານ, ຢາດີເຈັບແອວ, ງັ່ງໃສ່ນ້ຳລາຍ ແລະເຄື່ອງຂອງກະບອກແຕກສາລະພັດແບບເຊິ່ງບາງທີກະທັ້ງຜູ້ປະດິດຄິດແຕ່ງມັນອອກມາ ກໍອາດຈະບໍ່ຮູ້ເລີຍວ່າຊິເອົາມັນໄວ້ເຮັດຫຍັງ ນັ້ນກອງເກັບຢູ່ ເຊັ່ນເດີມ, ດັ່ງທີ່ຄາວຂ້າພະເຈົ້າຍັງເປັນເດັກນ້ອຍ ຢູ່ເທິງປະຕູປ່ອງຢ້ຽມປ່ອງສຸດທ້າຍ, ຢູ່ໃຕ້ເກົ້າຕະກຽງທີ່ເຮັດດ້ວຍແກ້ວບໍລິສຸດເຊິ່ງປົກຫຸ້ມໄປດ້ວຍຂີ້ຝຸ່ນນັ້ນ ມີຈີ່ໂກະແຫ້ງໂຕຫນຶ່ງວາງໄວ້. ນັ້ນແມ່ນວັດຖຸຢ່າງຫນຶ່ງທີ່ກໍ່ຄວາມສະຫລອກກອກຮ້ອຍແປດພັນປະການໃຫ້ແກ່ເດັກນ້ອຍ ແອຊູໂອເອີ.

ທັງສາວບາດຕີນ, ຂ້າພະເຈົ້າທັງຫລຽວຄືນມາເບິ່ງຈີ່ໂກະໂຕນັ້ນ. ມັນມີຫນັງແຫ້ງໆ, ເກົ່າແກ່ ແລະກ່ານສີຄຳ, ແລະກໍເຊັ່ນດຽວກັບເມື່ອກ່ອນນີ້, ຕານ້ອຍໆເບື້ອງຫນຶ່ງຂອງມັນເບີກກ້ວາງອອກມາແນມເບິ່ງໂລກດ້ວຍຄວາມຢ້ານກົວ. ບັນດາຄວາມຊົງຈຳພໍ່ຄົວມົວກ່ຽວກັບຄາວເຍົາໄວແລ່ນວູບຜ່ານມັນສະຫມອງຂອງຂ້າພະເຈົ້າ. ພໍ່ຂອງຂ້າພະເຈົ້າເຄີຍໃຊ້ຂ້າພະເຈົ້າມາຊື້ຢາຢູ່ແຫ່ງນີ້ ໃນເວລາທີ່ແມ່ຂອງຂ້າພະເຈົ້າເກີດການເຈັບປ່ວຍ...

ບັງເອີນຂ້າພະເຈົ້າເຕະສະດຸດແລະລົ້ມລົງເທິງທາງຍ່າງ. ບາງທີປາຍເກີບຂອງຂ້າພະເຈົ້າອາດຕ້ອງສະດຸດກັບຫີນກ້ອນໃດກ້ອນຫນຶ່ງທີ່ພົ້ນດິນຂຶ້ນມາ. ເຖິງຈັ່ງໃດກໍຕາມ, ເມື່ອຂ້າພະເຈົ້າຢືນຂຶ້ນໄດ້, ໃຊ້ແພມືນປັດຂີ້ຝຸ່ນຢູ່ຕາມສົ້ງເສື້ອນັ້ນ, ທັນໃດ ຫົວສະຫມອງຂອງຂ້າພະເຈົ້າກໍວິນວຽນ, ຫູເບື້ອງຊ້າຍຮ້ອນຂຶ້ນວູ່ງ. ຊາຍຊະລາແຈ້ຄົນຫນຶ່ງເວົ້າກັບຂ້າພະເຈົ້າວ່າ:

- ນີ້ທ້າວເອີຍ, ໄປຫາທ່ານ ອັກພີ ສາ! ໂຕເຈົ້າເຫລົ້ນຫລາຍບ່ອນໃດຫັ້ນ.

ຊາຍຊະລາຜູ້ນັ້ນໃຈດີຫລາຍ,    ເພິ່ນໄຂປະຕູຮ້ານຂາຍຢາທີ່ຢູ່ຕໍ່ຫນ້າຂອງຂ້າພະເຈົ້ານັ້ນໃຫ້.

ຂ້າພະເຈົ້າຍ່າງເຂົ້າໄປ, ຫູຫນວກຕັນປຶກ. ທ່ານ ອິກພີ, ເຈົ້າຂອງຮ້ານຂາຍຢາ, ຄົນສໍ່າຮານປານດຽວກັບພໍ່ຂ້າພະເຈົ້າ, ຢືນຢູ່ເບື້ອງຫລັງໂຕະຂາຍເຄື່ອງ, ເຮັດຕາຊຶມໆທັງຄູ່, ເພິ່ນພວມກູຫລັງໃສ່ຝາຕູ້ທີ່ບັນຈຸຢາແອອັດຢູ່. ເບິ່ງສີຫນ້າຂອງເພິ່ນແລ້ວ ເຫັນວ່າການກະທໍາດັ່ງກ່າວນີ້ພວມເຮັດໃຫ້ເພິ່ນມີຄວາມເພິງພໍໃຈຢ່າງຍິ່ງ.

ທ່ານຫມໍ ຟລີດ, ຄົນຕຸ້ຍພີດີງາມຜູ້ຫນຶ່ງ, ພວມນັ່ງຢູ່ຂ້າງໂຕະນ້ອຍໆໃກ້ກັບປ່ອງຢ້ຽມ. ເພິ່ນນັ່ງຢຽດຕົວອອກຊື່ ເກືອງຂັ້ນວ່າບໍ່ແນມເຫັນຕັ່ງອື່ນັ້ນເລີຍ, ຄ້າຍຄືວ່າທ່ານຫມໍປະຈໍາເມືອງແອຊູໂອເອີຂອງພວກຂ້າພະເຈົ້າ ພວມສະທົດຢູ່ເທິງເວທີ ຄືກັບຫມາກປູມເປົ້າຍັກຫນ່ວຍຫນຶ່ງ, ເພິ່ນທັງໂບກມືປະຕິເສດ, ທັງຢືນຢັນບັນຫາໃດບັນຫາຫນຶ່ງກັບເຈົ້າຂອງຮ້ານຂາຍຢາຢູ່ຢ່າງເນີນິວ:

- ຢືນຢູ່ໃນທັດສະນະວິທະຍາສາດແລ້ວ ບັນຫານີ້ເປັນໄປບໍ່ໄດ້...

ແຕ່ຂະນະດຽວກັນ ຂ້າພະເຈົ້າກໍ່ກ້າວຜ່ານປາກປະຕູຂອງຮ້ານຂາຍຢາເຂົ້າໄປ, ທ່ານຫມໍຟລີດຫຸບປາກທັນທີ, ສ່ວນທ່ານ ອິກພີ ນັ້ນມືນຕາຫນ້ຽງຂຶ້ນມາ:

- ນ້ອຍ ເຊມຸຍແອນ ຫວະຫັ້ນ?

ຂ້າພະເຈົ້າຊີ້ໃສ່ຫູທີ່ບາດເຈັບ. ໂດຍທີ່ບໍ່ປ່ອຍໃຫ້ຂ້າພະເຈົ້າທັນໄດ້ອ້າປາກເວົ້າຂຶ້ນມາພໍຄວາມ, ເພິ່ນທັງສອງກໍ່ຟ້າວບົ່ງມະຕິພະຍາດໂລດ.

- ນ້ອຍເຊມຸຍແອນ, ເຂົາເຈົ້າຕ່ອຍເຈົ້າໄດ້ແນບນຽນຫລາຍ, - ເຈົ້າຂອງຮ້ານຂາຍຢາເວົ້າ, ເຊົາກູຫລັງແລະມືນຕາເບື້ອງນັ້ນຂຶ້ນຕື່ມ. - ທ່ານຫມໍ, ທ່ານຈະໃຫ້ຄວາມເຫັນວ່າແນວໃດລະ?

ທ່ານຫມໍຟລີດຫົວແບບສະແດງຄວາມເຫັນໃຈ.

- ຮອຍຊູດ ແລະຊໍ້າເລືອດ. ບໍ່ມີຫຍັງອັນຕະລາຍແຕ່ວ່າບົ່ງາມຕາ.

ເປັນທີ່ຈະແຈ້ງວ່າທ່ານເຈົ້າຂອງຮ້ານຂາຍຢາມີນິດໄສສອດຮູ້ສອດເຫັນ, ເພິ່ນກາມຍ່າງເບິ່ງ:

- ຕ່ອຍກັບຫວ່າງໃດລະ ເຊບຸຍແອນ?

- ບໍ່ຕ້ອງການອີກ, ທ່ານ ອິກພີ. ທຸກສິ່ງທຸກຢ່າງມັນຈະແຈ້ງແລ້ວ. ທ່ານ ຟລິດ ທັງເວົ້າທັງຫັນໃຈຫອບແລະໃຊ້ແພມົນໄຫມສີອິດເຊັດໃບຫນ້າແດງອື່ງ, ມົນພົ້ງວົ້ງທີ່ເສີມດ້ວຍເຄົາສີແສດນັ້ນ.

ເພິ່ນຍືນຢູ່ຫ່າງຂ້າພະເຈົ້າປະມານສາມກ້າວເພື່ອແຍງໄປແຍງມາ, ປານວ່າພວມແຍງເບິ່ງຂ້າພະເຈົ້າຜ່ານແກ້ວຂະຫຍາຍນີ້ແລ້ວ, ແລ້ວເພິ່ນກໍເວົ້າຂຶ້ນດັ່ງງວ່າ:

- ມັນຈະແຈ້ງປານກັບສ່ອງຜ່ານກ້ອງຈຸລະທັດນີ້ພຸ້ນດວ່າ, ກ່ອນຫນ້ານີ້ປະມານສິບສອງຊົ່ວໂມງ, ວັດຖຸອັນຫນຶ່ງມີອາການຍືດຫົດຕິກລິງມາດ້ວຍມູມຫງ່ງງສາມສິບອົງສາໄດ້ກະທົບໃສ່ຫົວຂອງຊາຍຫນຸ່ມຄົນນີ້. ກ້າຫາກຕິກລິງຕາມມູມຕັ້ງສາກແລ້ວວັດຖຸນັ້ນກໍຈະເຮັດໃຫ້ຄໍຂອງລາວຫັກໄປແລ້ວ. ຢ່າງນ້ອຍທີ່ສຸດກໍແມ່ນກືກກະທົບກະເທືອນທາງມັນສະຫມອງ.

- ຂໍໂທດນຳທ່ານທັງສອງ, - ຂ້າພະເຈົ້າເວົ້າ. - ຂ້າພະເຈົ້າລົ້ມຢູ່ກະຫນົບພຸ້ນແລະກໍບໍ່ແມ່ນກ່ອນນີ້ສິບສອງຊົ່ວໂມງ, ຫາກແມ່ນຫວ່າງກີ້ນີ້. ບາງທີຫູຂອງຂ້າພະເຈົ້າ...

ຂ້າພະເຈົ້າວ່າຊິຄຳເບິ່ງຫູ ເບື້ອງບາດເຈັບທີ່ເລີ່ມຕົ້ນໃຄ່ລົກບົກຂຶ້ນມານັ້ນ.

- ຢ່າໃຊ້ມືແຕະຕ້ອງມັນ! - ທ່ານຫມໍຟລິດ ເວົ້າດ້ວຍສຳນຽງສີຮ້າຍໆ. ເພິ່ນຫຍຸມຄິ້ວເຂົ້າຢ່າງຂຶງວຊຸ່ນ. ແລະອອກຄຳສັ່ງໃຫ້ເຈົ້າຂອງຮ້ານຂາຍຢາ: - ປະຕິບັດການທີ່ຈຳເປັນທັງຫມົດໃຫ້ລາວ, ທ່ານ ອິກພີ. ທຸກສິ່ງທຸກຢ່າງລ້ວນແຕ່ຈະແຈ້ງຄືສ່ອງເບິ່ງໃນກ້ອງຈຸລະທັດນີ້ແຫລະ.

- ມານີ້, ນ້ອຍ ເຊບຸຍແອນ, - ເຈົ້າຂອງຮ້ານຂາຍຢາເອີ້ນຂ້າພະເຈົ້າຢ່າງນິ້ມນວນ.

ເພິ່ນຄ້ານທີ່ຈະອ້ງໂຕຂ້າມໂຕະຂາຍເຄື່ອງມາຫາຂ້າພະເຈົ້າ. ຂ້າພະເຈົ້າຈຶ່ງຫຍັບມາທີ່ຕູ້ທ່ານ ອິກພີ ພວມຕິດບັງຕິດໃຫ້ຂ້າພະເຈົ້າ. ສ່ວນທ່ານຫມໍຟລິດນັ້ນພັດຝອຍຕໍ່ເລື່ອງທີ່ກືກຕັດສະບັ້ນລົງ ຍ້ອນການມາເກີງຢ່າງກະທັນຫັນຂອງຂ້າພະເຈົ້າ.

- ນີ້ເດີ, ເພື່ອນອິກພີ, ຄວາມຈິງມັນເປັນຈັ່ງຊີ້. ເຂົາເຈົ້າເຈັບເປັນຍ້ອນບໍ່ປະຕິບັດຕາມບັນດາຫລັກສຸຂະພິບານ, ຫລືວ່າຍ້ອນກືກກະທົບກະເທືອນໃນກໍລະນີເຄາະຮ້າຍຕ່າງໆ, ຫລືວ່າຍ້ອນພວກແມ່ພະຍາດທີ່ມີເຊື້ອໂລກ. ກິນຫລາຍໂພດ, ດື່ມຫລາຍໂພດ, ຕາກແດດຫລາຍໂພດ, ປະໃຫ້ຕີນມືເຢັນກໍເຈັບ. ຕີກັນຫລືລົ້ມຢູ່ຕາມກະຫົນນຫົນທາງຄືບ່າວນ້ອຍ

ເຊມຸຍແອນຂອງພວກເຮົາ -ກໍເຈັບ. ແມ່ພະຍາດເຂົ້າໃນຮ່າງກາຍ, ເກີດແມ່ແພ່ລູກຢູ່ໃນນັ້ນ-ກໍເຈັບ. ທ່ານ ອິກພີ, ບໍ່ມີພະຍາດຊະນິດໃດທີ່ບໍ່ເກີດມາຈາກຜົນສະທ້ອນໂດຍທີ່ບັນດາແມ່ພະຍາດເປັນຜູ້ກໍ່ຂຶ້ນ, ບັນດານັກປາດຜູ້ຍິ່ງໃຫຍ່ຄື ປາດສະເຕີ ແລະ ກົກ ໄດ້ພິສູດໄວ້ແບບນັ້ນ. ກ້າໃພກ້າສິງໃສ່ບັນຫານັ້ນແລະຍັງດຳເນີນການທົດລອງທີ່ມີໂທດກໍອີກແລ້ວ, ທ່ານຮູ້ບໍ່, ເພື່ອນອິກພີ... -ຮອດຕອນນີ້ ມືຂອງທ່ານພລິດ ຍົກຂຶ້ນສູງຄືກັບຈະຕີໃຜຄົນໜຶ່ງ:

-...ກົດໝາຍຈະລົງໂທດຜູ້ນັ້ນກາບມີຄວາມຜິດ. ແລະປະກົດວ່າໄດ້ລົງໂທດໄປແລ້ວ. ຄວາມຈິງແລ້ວ, ມີບາງຄັ້ງຜູ້ທີ່ບໍ່ມີໂທດຫຍັງ ກໍຕ້ອງເຈັບຊ້ຳໄປຍ້ອນເລື່ອງນັ້ນ, ແຕ່ຈະແຈ້ງວ່າກົດເກນທຳມະຊາດມັນເປັນຈັ່ງຊັ້ນ...

ທ່ານຫມໍພລິດທັນໃຈໃຫຍ່. ທ່ານອິກພີຮຳແພແລ້ວ ແລະຊີ້ມືໃຫ້ຂ້າພະເຈົ້າເບິ່ງແວ່ນແຜ່ນໜຶ່ງເຊິ່ງແຂວນຢູ່ທ່າມກາງປ້າຍໂຄສະນາຊວນເຊື່ອຂອງບັນດາຮ້ານຂາຍຢາ.

-ແຍງແວ່ນເບິ່ງດູ, -ລາວເວົ້າ. -ບໍ່ເຫັນຮ່ອງຮອຍຫຍັງເລີຍ...

ລາວຫົວແລະເວົ້າຕື່ມ:

-ເຈົ້າຕ້ອງສາລະພາບວ່າເຈົ້າດື່ມເຫລົ້າຫລາຍສົມຄວນ. ເຈົ້າມັນຫອມກຸ່ນໆຄືກັບຕົ້ນຫມາກນາວພວມອອກດອກນີ້ແຫລະ. ຂ້ອຍວ່າໃຫ້ເຈົ້າໄປນອນຢູ່ເຮືອນໃຫ້ມັນອີ່ມຕາສາ...

ຂ້າພະເຈົ້າວ່າຈະເວົ້າກັບລຶງເກົ້າໂຕນັ້ນວ່າ ຂ້າພະເຈົ້າບໍ່ຈຳເປັນຈະໄປນອນດອກ, ແຕ່ແລ້ວກໍຮູ້ສຶກວ່າມັນເປັນເລື່ອງທີ່ໄຮ້ປະໂຫຍດ.

ຂ້າພະເຈົ້າພຶມພຳ:

-ຂ້ອຍເຈັບຫົວ.

-ຄັນຊັ້ນກະເອົາຢາເມັດເຫລົ່ານີ້ໄປນຳ, -ທ່ານ ອິກພີສະເຫນີ.

-ຢາພິຫ່າອີ່ຫຍັງ! -ທ່ານຫມໍ ພລິດທັງເວົ້າທັງເຊັດນ້ຳເຫື່ອຢູ່ເທິງຫນ້າຜາກຢ່າງໂມໂຫ. ລາວໄດ້ເຂົ້າມາຂັດຈັງຫວະທຸລະກິດການຄ້າລະຫວ່າງສອງຄົນພວກເຮົາ. -ເຂົາເຈົ້າອັດຢາເມັດເຫລົ່ານັ້ນຂຶ້ນມາປານວ່າ ຈານຊຸຂີ້ກອກຢາເອົາໂລດ. ຂ້າພະເຈົ້າກືນກິນຢາເມັດເຫລົ່ານັ້ນ ເພື່ອຕ້ານຕຸ້ຍມາເປັນໂຕນໆແລ້ວ, ແຕ່ກັບຕຸ້ຍຕື່ມຊ້ຳ, ຄືທ່ານເຫັນແຫລະ... ຍ້ອນ

ແນວນັ້ນ ຈົ່ງຮັກສາເງິນຂອງເຈົ້າເອົາໄວ້ເພື່ອນຫນຸ່ມເອີຍ. ດຽວນີ້ລອງບອກໃຫ້ຮູ້ແດ່ວ່າ ເຈົ້າຫັນໃຈຝືດແດ່ບໍ່?

ຄຳຖາມນີ້ ຂອງທ່ານຫມໍພລິດບໍ່ພຽງແຕ່ໂດ່ງດັງຢູ່ໃນຕົວເມືອງ ແອຊໂອເອີເທົ່ານັ້ນ. ກ່ອນຫນ້ານີ້ ລາວເຄີຍລົງພິມບົດຄວາມຫນຶ່ງໃນວາລະສານ "ຂັດຈ້ອນ" ພາຍໃຕ້ຫົວເລື່ອງ: "ຫັນໃຈຝືດຄືໄພພິບັດອັນຫນຶ່ງຂອງມວນມະນຸດ". ຈາກນັ້ນ ຄວາມຄຶດກ່ຽວກັບພະຍາດຫັນໃຈຝືດໄດ້ນຳເອົາທ່ານຫມໍອອກໄປຈາກຫົນທາງແຫ່ງຄວາມຄຶດອັນເປັນປົກກະຕິ ຢ່າງຊ້າໆແລະແນ່ນອນ. ລາວຍົກຄຳຖາມດັ່ງກ່າວກັບຄົນເຈັບທຸກໆຄົນແລະຕໍ່ກະທັ້ງຜູ້ທີ່ໄດ້ໂອ້ລົມກັບລາວຢ່າງບັງເອີນ. ຕໍ່ຜູ້ທີ່ມາຖາມລາວເກືອງວິທີປົວຕີນດ້ານໄດ້ຫລາຍມື້ມາແລ້ວນັ້ນ ລາວກໍຖາມເຂົາເຈົ້າວ່າຫາຍໃຈຝືດແດ່ບໍ່.

- ບໍ່, ທ່ານຫມໍ, - ຂ້າພະເຈົ້າຕອບຢ່າງສຸພາບ.

- ແປກເວີຍ, - ທ່ານຫມໍພລິດ ພຶມພຳແລະເຮັດຕາຫີບເຂົ້າເບື້ອງຫນຶ່ງ. - ແຕ່ວ່າຢູ່ໃນໂລກນີ້ສັງຂານຍ່ອມມີການປ່ຽນແປງ.

ທ່ານຫມໍເສືອກຕາແນມໄປທາງເຈົ້າຂອງຮ້ານຂາຍຢາ: - ແມ່ນຕີ, ທ່ານອົກພີ?

ເພິ່ນຜູ້ນີ້ພຽງແຕ່ຍົກບ່າ. ຂະນະດຽວກັນນັ້ນ ບານປະຕູຢູ່ລະຫວ່າງກາງຂອງບັນດາຕູ້ນັ້ນກໍໄຂອອກ. ແລະ ແອເດີ, ລູກຊາຍຂອງເຈົ້າຂອງຮ້ານຂາຍຢາກໍປະກົດຕົວຂຶ້ນ, ເຂົານຸ່ງເສື້ອຄຸມຂາວທີ່ບໍ່ຄ່ອຍຈະສະອາດດີພໍເທົ່າໃດ, ແພເຊັດຫນ້າພາດຢູ່ເທິງບ່າ. ເຖິງແມ່ນວ່າຫົວຂອງຂ້າພະເຈົ້າຈະຮຳບັງໄວ້ ເຂົາກໍຍັງຈື່ໄດ້ທັນທີໂລດ.

- ໂອຍ! ເຊມຸຍແອນ ເພື່ອນເກົາເອີຍ! ເຮົາພວມປຸງແຕ່ງນ້ຳ ກັ່ນ ຢູ່ໃນຫ້ອງທົດລອງບັງເອີນເລີຍໄດ້ຍິນສຽງປາກທີ່ຄຸ້ນຫູ... ສະບາຍດີໂຕເອີຍ. ໂຕເປັນຫຍັງຫັ້ນ? ລົ້ມຫວະ? ມາແຕ່ຫວ່າງໃດລະ? ຮູ້ຂ່າວແລ້ວຫວະ?

- ບໍ່ຮູ້ຫຍັງເລີຍ! - ຂ້າພະເຈົ້າຈັບມືປຽກໆຂອງ ແອເດີແລະຕອບໄປ. - ຍ້ອນເລື່ອງຂີ້ຊວຍນ້ອຍໆອັນຫນຶ່ງທີ່ເຮັດໃຫ້ເຮົາບໍ່ສາມາດໄປທີ່ໂອນມາອຸນດຽວນີ້ໄດ້.

- ໂຕຍັງໄດ້ພົບພໍ່ຢູ່ຫວະ? - ແອເດີ ຮ້ອງຂຶ້ນ. - ແຕ່ທ່ານຫມໍພລິດຮູ້ຈັກ...

- ປະຈຸບັນນີ້ ຍັງຄົງບໍ່ທັນມີຂ່າວຫຍັງແນ່ນອນເທື່ອ, - ທ່ານຫມໍເວົ້າພຶມໆ. - ແຕ່ມີຂ່າວ

ລືກັນວ່າຢູ່ໂອນມາອູນ ເຂົາເຈົ້າໄດ້ທຳການທົດລອງຜ່າຕັດສັດເປັນຕ່າງໆ, - ທ່ານຫມໍ ຟລິດ ພຶດມືຂວາຂຶ້ນເພື່ອເປັນການກ່າວເຕືອນແລະເວົ້າຕື່ມ: - ບໍ່ໄດ້ຮັບອະນຸຍາດຈາກອຳນາດການປົກຄອງ...

- ເລື່ອງນີ້ກໍກົດຫມາຍຫ້າມ, - ອິກພີເສີມຂຶ້ນ, ພ້ອມທັງເກັບມັ້ງນຫລອດຢາຢູ່ເທິງຮ້ານຂາຍເຄື່ອງ.

- ຊິເປັນຫຍັງລະ? - ຂ້າພະເຈົ້າເວົ້າແລະຮູ້ສຶກວ່າຫົວຍິ່ງເຈັບປວດຂຶ້ນກ່ວາເກົ່າ.

- ພຸດໂທເອີຍ, ລາວຍັງບໍ່ທັນເຂົ້າໃຈເທື່ອ! - ທ່ານຫມໍຟລິດເລີ່ມມີການເຫນັງຕີງຢູ່ເທິງຕັ່ງ, ລາວພວມວ່າຊິກອດສະຫມໍ. - ເອີ, ຂ້າພະເຈົ້າຕ້ອງໄປຢາມຄົນເຈັບກ່ອນລະ. - ລາວລຸດຕົວອອກຈາກຕັ່ງອີ້ ແລະຈັບເອົາຫີບທີ່ມີລາຍກ່ານໃຊ້ເພື່ອບັນຈຸເຄື່ອງມືຂອງລາວນັ້ນ. - ນິປີນເອີຍ, ເລື່ອງມັນຈະພົວພັນເຖິງເຈົ້າອີກນຳໃດ. ເຈົ້າຄວນຮູ້ວ່າແມ່ນທ່ານ ລໍເດີ ປາກລິນເຕີນເອງນັ້ນແລ້ວ ແລະກໍບໍ່ແມ່ນໃຜອື່ນອີກທີ່ດຳເນີນການທົດລອງຢູ່ໃນຜາສາດ.

- ຟັງ, ຟັງຫັ້ນ! - ທ່ານ ອິກພີເວົ້າໄວໆ, ປານວ່າທ່ານຫມໍ ຟລິດພວມກ່າວຄຳປາໄສຢູ່ໃນສະພາເອົາໂລດ.

ຂ້າພະເຈົ້າແຜດສຽງຂຶ້ນ:

- ແລ້ວມັນຊິເປັນຫຍັງລະ?

ທ່ານຫມໍແລະເຈົ້າຂອງຮ້ານຂາຍຢາແນມເບິ່ງຂ້າພະເຈົ້າດ້ວຍຄວາມສົມເພດ.

- ບັນດາການທົດລອງຂອງລໍເດີໄດ້ຮັບການຈັດຂຶ້ນຢ່າງລັບໆເຖິງຂັ້ນບໍ່ມີໃຜຈະຄາດຕວງເອົາໄດ້. ມາດຽວນີ້, ຜົາກົ້ງນັ້ນກໍກຮື້ອອກມາແລ້ວ.

ທ່ານຫມໍຟລິດແກວ່ງຫົວ.

- ແລະຂ້າພະເຈົ້າກໍຈະບໍ່ແປກໃຈເລີຍ ກ້າທ່ານ ລໍເດີ ປາກລິນເຕີນຫາກທຳການທົດລອງກະທັ້ງໃນຮ່າງກາຍຂອງຄົນທີ່ຍັງມີຊີວິດຢູ່... ກົດຫມາຍຈະລົງໂທດລາວ... ກ້າຫາກຜ່ານມາບໍ່ທັນໄດ້ລົງໂທດເທື່ອ.

ຂ້າພະເຈົ້າບໍ່ມັກນ້ຳສຽງໂມໂຫຂອງທ່ານຫມໍເລີຍ. ເຖິງແມ່ນທຸກໆຄົນໃນເມືອງ ແອຊູໂອເຣີລອນແຕ່ຮູ້ດີວ່າທ່ານຫມໍຟລິດ ຍາມໃດກໍຢູ່ໃນສະພາບໂມໂຫໂຫໂສມາແຕ່ດົນນານແລ້ວ,

ເພາະລາວມີລູກສາວຂີ້ເຮີສອງຄົນຄື ເອນີ ແລະ ເຢນີ ເຊິ່ງລາວບໍ່ອາດຈະຊອກຜົວໃຫ້ໄດ້ເລີຍ. ຍ້ອນແນວນັ້ນລະການທີ່ຈະໂຕ້ຖຽງກັບທ່ານຫມໍຈຶ່ງໄຮ້ປະໂຫຍດ. ເຖິງຢ່າງໃດຂ້າພະເຈົ້າກໍຄົງຂັດຄ້ານ:

- ຜູ້ດຳເນີນການທາງວິທະຍາສາດຍ່ອມມີອິດສະຫລະພາບໃນການທົດລອງ.

ຄຳເວົ້າຂອງຂ້າພະເຈົ້າເປັນຜົນ. ທ່ານຫມໍຟລິດກະພິດມືຂຶ້ນ.

- ອາຮາ, ຄົນຊັ້ນຄູ່ມື້ນີ້, ໂຮງຮຳໂຮງຮຽນຕ່າງໆເຂົາເຈົ້າສອນກັນແບບນີ້ຫວະ!

ຊາຍຊະລາ ອິກພີ ຫນ້າຫົ້ວຄິ້ວສິນເຖິງຂັ້ນວ່າ ແນມເບິ່ງຫນ້າຂອງລາວແລ້ວ ຕ້ອງເກີດຄວາມຫມຸດຫມິດໃຈຂຶ້ນມາໂລດ. ລາວໄລ່ແອເດີ:

- ໄປເຮັດວຽກສາດີ! ມື້ຍັງກຽມນ້ຳກົ່ນ ໃຫ້ທ່ານ ເຊີຍເດີນ ແລະຢາເມັດໃຫ້ພະສັງຄະປະທານບໍ່ທັນແລ້ວອີກແມ່ນບໍ່? ໄປໆ!

ແອເດີ ຄ່ອຍໆລົບເຂົ້າໄປທາງຫລັງຕູ້ຢາ. ເປັນທີ່ຈະແຈ້ງແລ້ວວ່າ ທ່ານ ອິກພີພະຍາຍາມຮັກສາທ່າທີເຄັ່ງຄັດອັນນີ້ກັບເຂົາ.

ຍ້ອນວ່າຂ້າພະເຈົ້າຢາກຈະແກ້ແຄ້ນແທນແອເດີ, ຂ້າພະເຈົ້າຈຶ່ງເວົ້າຂຶ້ນວ່າ:

- ທ່ານທັງສອງຮູ້ບໍ່, ຖ້າວິທະຍາສາດຫາກຕ້ອງການ ການທົດລອງແບບສ່ຽງໄພແລ້ວ, ຮ່າງກາຍຂອງຂ້າພະເຈົ້າຈະເປັນຂອງ ...

ທ່ານຫມໍຟລິດຫົວລັ່ນຂຶ້ນ:

- ເປັນຂອງນັກປາດທ່ານ ປາກລິນເດີນ? ຮາ-ຮາ-ຮາ! ໂອຍ, ບັກຫລ້າປົນ, ເຈົ້າຊິເຮັດໃຫ້ຂ້ອຍແລະທ່ານອິກພີຕາຍໄປກ່ອນທີ່ທ່ານລໍເດີຈະເຮັດໃຫ້ເຈົ້າຕາຍຊ້ຳແລ້ວ. ເຈົ້າເມືອເຮືອນສາແລະເອົານ້ຳກ້ອນຈັກໂງ່ນຕັ້ງໃສ່ຫົວຫັ້ນ. ມັນຕັ້ງແມ່ນຍ້ອນເຈົ້າຖືກກະທົບກະເທືອນທາງມັນສະຫມອງແທ້ໃດນີ້...

ຂ້າພະເຈົ້າຈັບຫມວກຂຶ້ນມາຢ່າງເຢັນຊາ:

- ລາກ່ອນທ່ານ.

- ຂໍນຳເຈົ້າອັດຫນຶ່ງ, - ທ່ານອິກພີເຕືອນຂ້າພະເຈົ້າໃຫ້ຈ່າຍເງິນຄ່າບັງຕິດປາດຂອງລາວ.

ທ່ານເຈົ້າຂອງຮ້ານຂາຍຢາຢາກຈະເກັບລາຍໄດ້ຈາກການຂາຍເຄື່ອງ, ດັ່ງນັ້ນສຳນຽງຂອງລາວຈຶ່ງມີສ່ວນສະເທືອນໃຈ.

ຫລຽນເງິນທີ່ຂ້າພະເຈົ້າໂຍນໃສ່ຮ້ານຂາຍເຄື່ອງນັ້ນດັງຂະແລ້ງຂຶ້ນບາດຫນຶ່ງ. ທ່ານຫມໍແນມເບິ່ງມັນດ້ວຍທ່າທາງກະບຸກະຫນອມ.

- ນິ ບິນ ເອີຍ, ຂ້ອຍຈະສົ່ງໃບຄິດໄລ່ເງິນຄ່າກວດສຸຂະພາບແລະແນະນຳໃຫ້ໃຊ້ຢາໄປທີ່ເຮືອນຂອງເຈົ້າເດີ, - ທ່ານຫມໍເວົ້າຢ່າງລ່ຽນໄຫລ. - ເລື່ອງນັ້ນມັນກໍທຳມະດາຢູ່ດອກ: ທ່ານຫມໍຜລິດກໍຢາກຈະມີສ່ວນໄດ້ເຫມືອນກັນເພາະໄດ້ຊ່ວຍປຸກຊີບຜູ້ຫນຶ່ງຢ່າງກະທັນຫັນ.

## III

ຫົວຂອງຂ້າພະເຈົ້າເຈັບຈິນທົນບໍ່ໄຫວອີກແລ້ວ. ຂ້າພະເຈົ້າຕັດສິນໃຈບໍ່ໄປ ໂອນມາອູນອີກ ແຕ່ຈະລໍຖ້າພໍ່ຂອງຂ້າພະເຈົ້າຢູ່ທີ່ເຮືອນ.

ສາວນາງນ້ອຍ ເມຣີ, ລູກສາວຂອງຄອບຄົວ ວິນເທທີ່ເປັນຄົນໃກ້ຄຽງກັນນັ້ນ, ນັ່ງຢູ່ເທິງຕັ່ງມ້າຂ້າງປະຕູສວນຂອງຄອບຄົວຂ້າພະເຈົ້າ. ນາງນ້ອຍກ່ອມຕຸກກະຕາທີ່ເຮັດຈາກແພຂາດດ້ວຍສຽງເສາະໃສແລະໂສກາອາວອນ:

> ເດັກນ້ອຍໄຫ້, ໂອນໍ ນ້ຳຕາຫລັ່ງ
> ໄຫ້ຍ້ອນເຈັບ, ປວດຊ້ຳເກີນຕ້ານຕໍ່ໄຫວ
> ພວກນາງໄຫ້, ໂອນໍ ໄຫ້ຈົ່ມ
> ໄຫ້ເພາະໂສກ, ເຂົາເຈົ້າໄຫ້ເພາະເຫງົາ.
> ຊຸມອາວໄຫ້, ໂອນໍ ສັ່ງມາຕ່າງ
> ໄຫ້ຍ້ອນສຸກມ່ວນແມ້ງ, ເຂົາເຈົ້າໄຫ້ເພາະຊື່ນບານ.

ນາງນ້ອຍພິມເຫລືອງທັກທາຍຂ້າພະເຈົ້າ.

- ອາວ ເຊມຸຍແອນ! ... ໂອ້ຍ, ອາວຕີກັນຫວະ? ຫນ້າອາວຊ້ຳນູມຫມົດ! - ເມຣີຫົວຂຶ້ນຢ່າງສະຫລອກກອກ. - ຫລານຮູ້ໃດ... ພວກເມົາເຫລົ້າມັກແຕ່ຕີກັນ.

ຫົວໃຈຂອງຂ້າພະເຈົ້າຕຶບຕັບເຂົ້າໂດຍບໍ່ໄດ້ຕັ້ງໃຈ, ຂ້າພະເຈົ້າເວົ້າອອກມາດ້ວຍຄວາມພາກພູມໃຈລະຫນັກແຫນ້ນວ່າ:

- ຫລານເດົາຖືກແລ້ວ. ອາວທ້າວຕີເລີຍຖືກເຂົ້າຈັດເອົາ. ແຕ່ວ່າພວກອາວບໍ່ໄດ້ໃຫ້ຍ້ອນເຈັບຊ້ຳໃດ!

ປະຕູສວນຖືກໄຂອອກ, ເອດີ, ເອື້ອຍຂອງເມຣີ, ກ້າວເຂົ້າມາຫາຂ້າພະເຈົ້າຢ່າງໄວວາ.

- ພຸດໂທເອີຍ, ອ້າຍ ເຊນຸຍແອນ ຖືກບາດເຈັບຫວະ?

ພວງຜົມກູດສີຂີ້ເທົ່າຂອງ ເອດີຫັນມາເປັນສີທອງແດງຢູ່ໃຕ້ແສງແດດແຫ່ງດວງອາທິດ. ດວງຕາເລິກຂຳຂອງນາງແນມເບິ່ງຂ້າພະເຈົ້າຢ່າງປ່ຽມລົ້ນໄປດ້ວຍຄວາມເປັນຫ່ວງ.

- ອັນຕະລາຍຫລາຍບໍ່?

ຂ້າພະເຈົ້າຫົວສີອາຍໆ, ຈຶ່ງແນມເບິ່ງໃບຫນ້າອັນເຍົາໄວຂອງນາງ, ຊຶ່ງແມ່ນດວງຫນ້າທີ່ຂ້າພະເຈົ້າບໍ່ອາດລືມລົງໄດ້ຈັກເທື່ອນັ້ນ.

- ຂໍໂທດເດີ ເອດີ, ອ້າຍເວົ້າຍອກຊື່ງດອກວ່າທ້າວຕີກັນ. ມີແຕ່ຮອຍແປ້ວຫນ້ອຍດຽວເທົ່ານັ້ນ. ອ້າຍພ້າວໄປຫາຄົວລົດດັກຊີ ເລີຍລົ້ມຢູ່ໃກ້ໆຮ້ານຂາຍຢາຫັ້ນ. ອ້າຍຢາກໄປພົບພໍ່ຂອງອ້າຍທີ່ ໂອນມາຊຸນ...

- ເອີ, ນ້ອງເຂົ້າໃຈ ອ້າຍ ເຊບຸຍແອນເອີຍ, - ເອດີ ເວົ້າຂຶ້ນ, ນາງຍິ່ງກາງ່ວມເຫງົາແລະງຽບຂຶມກ່ວາເກົ່າ. - ອ້າຍຈະຕ້ອງຫຸ່ນຫ່ຽງ.

- ແມ່ນແລ້ວ, ອ້າຍຕັດສິນໃຈກັບຄືນມາລໍຖ້າພໍ່ຢູ່ເຮືອນພີ້...

ແມ່ເຖົ້າ ໂອລີວີອາ ປະກົດຕົວຂຶ້ນຢູ່ທີ່ປາກປະຕູ. ເມື່ອແນມເຫັນຫູຂອງຂ້າພະເຈົ້າພັນບັງໄວ້ ແມ່ເຖົ້າກໍມີອາການກະວົນກະວາຍຈົນເກືອບຈະຮ້ອງໄຫ້ຂຶ້ນ. ບໍ່ພໍເທົ່າໃດນາທີຕໍ່ມາ, ຂ້າພະເຈົ້າກໍໄດ້ມານັ່ງຢູ່ເທິງຕັ່ງຊາລົງເກົ່າຂອງພໍ່ຂ້າພະເຈົ້າ. ແມ່ເຖົ້າ ໂອລີວີອາແລ່ນໃຕ້ແລ່ນເຫນືອເພື່ອກຽມອາຫານເຊົ້າ. ປະກົດວ່າ ເອດີໄດ້ຊ່ວຍວຽກແມ່ເຖົ້າຢູ່ທາງເຮືອນຄົວ. ນາງສ່ອງເຂົ້າມາໃນຫ້ອງຊົ່ວຂະນະຫນຶ່ງແລະເວົ້າວ່າ:

- ເອີ, ອ້າຍ ເຊນຸຍແອນ ເອີຍ, ຕອນອ້າຍຍ່າງຈາກທ່າເຮືອມາຮອດນີ້, ນ້ອງແນມເຫັນອ້າຍໃດ. ແລ້ວຄາວຫນຶ່ງອ້າຍກໍພ້າວອອກໄປ. ເປັນອັນວ່ານ້ອງບໍ່ເຂົ້າໃຈເທີ່ງ...

- ເຂົ້າໃຈເກີງຫຍັງລະ, ເວົ້າຕິ, ເອດີ!...

- ບໍ່! ບໍ່! ອ້າຍຈະຕ້ອງພັກຜ່ອນ. ນອນສາອ້າຍ. ຂ້າພະເຈົ້າເຮັດຕີຮ້ອນອົກຮ້ອນໃຈຂຶ້ນ.

- ອ້າຍບໍ່ຕ້ອງການນອນ. ມີເລື່ອງຫຍັງເກີດຂຶ້ນຫວະ, ບອກມາເບິ່ງດູ?

ເອດີ ຫັນໃຈໃຫຍ່:

- ເຂົາເຈົ້າໄດ້ເລົ່າເລື່ອງທີ່ສະຍົດສະຫຍອງຫລາຍຢ່າງກ່ຽວກັບທ່ານ ລໍເດີ ປາກລິນ ເຕີນ...

ແມ່ເກົ້າ ໂອລີວີອາ ກ້າວເຂົ້າມາຕັດບົດ ເອດີ:

- ບໍ່ມີໃຜຮູ້ຫຍັງພໍເປັນເຫດເປັນຜົນດອກ, ຢູ່ ແອຊູໂອເຮີນ໌, ຍາມໃດກໍມີຕາຍແຕ່ຂ່າວອະກຸສົນ. ນາງ ເອດີທີ່ຮັກແພງເອີຍ, ຄືຈັ່ງວ່າ ຍາແມ່ ວິນເທ ພວມເອີ້ນເຈົ້າໃດຫັ້ນ.

ແມ່ເກົ້າ ໂອລີວີອາ ໄລ່ເອດີອອກໄປຢ່າງຄ່ອງແຄ້ວແລະຈັດແຈງອາຫານເຊົ້າທີ່ຮ້ອນໆອຸ່ນໆມາວາງໄວ້ເທິງໂຕະ.

- ກິນສາບ້ອຍ ເຊມຸຍແອນ ເອີຍ, ແລ້ວນອນພັກຜ່ອນຢູ່, ມີເລື່ອງຫຍັງເກີດຂຶ້ນລະ, ເລົ່າເບິ່ງດູນ້ອຍ?

ຫລັງຈາກຟັງຄຳເລົ່າຂອງຂ້າພະເຈົ້າແລ້ວ, ແມ່ເກົ້າ ໂອລີວີອາຜູ້ໂອບເອື້ອອາລີນັ້ນກໍໄດ້ແຕ່ແກວ່ງຫົວ, ແລະນັ່ງແນມເບິ່ງຂ້າພະເຈົ້າກິນດັ່ງເພິ່ນເຄີຍເຝົ້າບັງຄັບໃຫ້ຂ້າພະເຈົ້າກິນໃຫ້ຫລາຍໆແຕ່ຄາວຍັງເປັນເດັກນ້ອຍຢູ່.

- ນອນສາ, ຫລ້າຄຳແພງແມ່ເອີຍ, - ໂອລີວີອາເວົ້າຢ່າງນິ້ມນວນອ່ອນຫວານ. - ແມ່ເກົ້າໄດ້ຈັດແຈງຕຽງນອນແລະກົງນ້ຳຮ້ອນໄວ້ໃຫ້ຣິມແລ້ວນີ້.

ທັງເມື່ອຍແລະຮູ້ສຶກເປັນຫ່ວງເປັນໄຍ, ຂ້າພະເຈົ້າເຊືອບຫລັບໄປຢູ່ພາຍໃນເຮືອນຫລັງທີ່ແສນຄຸ້ນເຄີຍແລະເປົ່າປ່ຽວນີ້.

* * *

ເມື່ອຕື່ນຈາກນອນ, ຂ້າພະເຈົ້າກໍເຫັນພໍ່ກຳລັງນັ່ງຢູ່ທີ່ຕັ່ງນວມຂ້າງຕຽງຂອງຂ້າພະເຈົ້າ. ເກົ້າງຕະກຽງຖືກກົດໃຫ້ຕ່ຳລົງຕື່ມເພື່ອບັງແສງສະຫວ່າງໄວ້ສ່ວນໃດສ່ວນຫນຶ່ງ, ແສງໄຟ

ໄດ້ສາຍສ່ອງລົງມາໃສ່ມືທັງຄູ່ອັນເຫລືອງຫລ່າຂອງພໍ່ຂ້າພະເຈົ້າທີ່ວາງໄວ້ກັບທີວເຂົ່າທັງສອງເບື້ອງນັ້ນ.

- ພໍ່ກໍາໃຫ້ລູກຕື່ນຢູ່ບໍ່, - ພໍ່ຂ້າພະເຈົ້າເວົ້າອອກ. - ລູກຮູ້ສຶກເປັນແນວໃດ?

- ລູກແຂງແຮງດີແລ້ວ, ພໍ່ທີ່ຮັກແພງເອີຍ, - ຂ້າພະເຈົ້າເວົ້າແລະກະວ່າຈະລຸກຂຶ້ນ.

- ຫາລະນອນຢູ່ລູກເອີຍ, - ພໍ່ຂ້າພະເຈົ້າບອກ, ແລ້ວເດ່ມືມາໃຫ້ຂ້າພະເຈົ້າ, ຂ້າພະເຈົ້າກໍາມືນັ້ນໄວ້ແໜ້ນໆ. - ຫລ້າສວາຍແລ້ວ. ລູກຫາລະນອນຮອດມື້ອື່ນເຊົ້າສາກ່ອນ. ພໍ່ພຽງແຕ່ຢາກເວົ້າເພື່ອບໍ່ໃຫ້ລູກວິຕົກ...

ຄວາມເວົ້າຕ່າງໆເຫລົ່ານັ້ນຊວນໃຫ້ຂ້າພະເຈົ້າຫວນຄືນເຖິງທຸກໆເຫດການໃນມື້ນີ້ຂຶ້ນມາໄດ້ຢ່າງແຈ່ມຈັດ.

- ແຕ່ລູກຊໍ້າເລີ່ມມີຄວາມວິຕົກ, - ຂ້າພະເຈົ້າເວົ້າດັງໆ.

- ພໍ່ຈຶ່ງດຶງເກົ້າອີ້ກະທາງຂຶ້ນໃຫ້ລູກໄດ້ແນມເຫັນພໍ່ແດ່.

ແສງສະຫວ່າງສ່ອງເຂົ້າໃສ່ໃບໜ້າອັນຄ່ົມຄົມຂອງພໍ່ຂ້າພະເຈົ້າ. ໃບໜ້ານັ້ນຄ້າຍຄືກັບວ່າຈ່ອຍໂຊແລະແກ່ຊະລາລົງໄປ. ພໍ່ແນມເບິ່ງຂ້າພະເຈົ້າຢ່າງກະນຸກະນອມ.

- ພໍ່ຢູ່ນີ້ເດ, ລູກເຫັນແລ້ວບໍ່?

- ລູກເຫັນແລ້ວ, ແລະຢາກຮູ້ຈັກວ່າມີເລື່ອງຫຍັງເກີດຂຶ້ນກັບພໍ່.

- ເຊມຸຍແອນ, ລູກຢາກຮູ້ຄວາມຈິງຫວະ?

- ຈ້າວ.

- ຄວາມປະສົງຂອງລູກ ມັນສອດຄ່ອງເໝາະສົມທຸກຢ່າງ. ລຸງແຮັດຍີ ກໍເລັ່ງໃຫ້ພໍ່ເລົ່າໃຫ້ລູກຟັງທຸກຢ່າງທີ່ພໍ່ໄດ້ຮູ້ມາ.

ແລ້ວພໍ່ຂອງຂ້າພະເຈົ້າກໍເລີ່ມເຂົ້າເລື່ອງ.

- ທ່ານ ລໍເດີ ປາກລີນເຕີນ ມີ, ຫລືເວົ້າໃຫ້ຖືກກວ່ານັ້ນ, ແມ່ນເຄີຍມີເງິນຢ່າງພຽງພໍເພື່ອເຮັດທຸກສິ່ງທຸກຢ່າງທີ່ເພິ່ນຕ້ອງການນັ້ນໄດ້...

ຂ້າພະເຈົ້າຕັດຄວາມເວົ້າຂອງພໍ່ຂ້າພະເຈົ້າ:

- ພໍ່, ຈົ່ງອະໄພແດ່ລູກ, ພໍ່ວ່າ "ເຄີຍມີເງິນຢ່າງພຽງພໍ". ນີ້ຫມາຍຄວາມວ່າຈັ່ງໃດ, ທ່ານລໍເດີ ຕົກທຸກໄດ້ຍາກໄປແລ້ວຫວະ?

- ນັ້ນມັນເປັນພຽງແຕ່ເຄິ່ງຫນຶ່ງຂອງໄພພິບັດເທົ່ານັ້ນລູກເອີຍ. ທ່ານ ລໍເດີຂອງພວກເຮົາເປັນຜູ້ສຸດທ້າຍໃນຕະກຸນ ປາກລິນເຕີນ, ເປັນເຈົ້າຂອງແຫ່ງພາສາດ ໂອນມາອູນ. ບໍ່ມີຜູ້ສືບທອດໂດຍກົງ ເພາະເພິ່ນຢູ່ຢ່າງໂດດດ່ຽວປ່ຽວເອກາ. ເພິ່ນໄດ້ທຳພິທີປະກາດຫມັ້ນກັບນາງ ແອເວລີນ ຣາຣີແອັດ ຢູ່ທີ່ໂບດ. ແຕ່ພິທີແຕ່ງດອງນັ້ນ ຈຳຕ້ອງໄດ້ໂຈະໄວ້ມາຕັ້ງສາມປີແລ້ວ. ເລື່ອງນີ້ມີຫລາຍເຫດຜົນ. ລູກເອີຍ, ລູກບໍ່ສາມາດຈະເຂົ້າໃຈຫມົດທຸກບັນຫາໄດ້. ຄົນທົ່ວໄປຍັງຮູ້ຈັກບຸລຸດດັ່ງກ່າວນີ້ນ້ອຍເກີນໄປ, ແລະບາງທີ, ກຸ່ມຄົນຊັ້ນສູງນັ້ນ ຍິ່ງຈະຮູ້ຈັກເພິ່ນນ້ອຍເກີນໄປກ່ວາຜູ້ອື່ນເສຍອີກ. ຖ້າລູກຕ້ອງການແລ້ວ, ພໍ່ສາມາດບອກໃຫ້ລູກຮູ້ກໍໄດ້ວ່າທ່ານ ລໍເດີ ເປັນຄົນທີ່ແຕກຕ່າງຈາກຊົນຊັ້ນຂອງຕົນຢ່າງສົມບູນ ...

ຕາມຄຳທີ່ພໍ່ຂອງຂ້າພະເຈົ້າເລົ່ານັ້ນ, ທ່ານ ລໍເດີ ປາກລິນເຕີນ ເປັນນັກປາດໃຫຍ່ຜູ້ຫນຶ່ງ, ແລະໃນຕົວຈິງເພິ່ນໄດ້ດຳເນີນການທົດລອງຫລາຍຢ່າງຢູ່ໃນພາສາດ, ບາງທີອາດເປັນການທົດລອງກ່ຽວກັບສີລະສາດຂອງສັດແລະພືດພັນຕ່າງໆ. ບາງທີອາດເປັນຍ້ອນການເມົາມົວໃນການຄົ້ນຄວ້າທາງວິທະຍາສາດຂອງເພິ່ນທີ່ເຮັດໃຫ້ເພິ່ນຕ້ອງໂຈະການວິວາຫະມຸງຄຸນນັ້ນໄວ້. ເພິ່ນເຄີຍໄປທັດສະນາຈອນ, ແລະປະກົດວ່າການທັດສະນາຈອນຕ່າງໆເຫລົ່ານັ້ນ ລ້ວນແຕ່ມີການພົວພັນເຖິງການຄົ້ນຄ້ວາທາງວິທະຍາສາດຂອງເພິ່ນ.

ປະກົດວ່າ ແມັກແລ້ງ, ພີ່ນ້ອງຜູ້ໃກ້ຊິດຂອງ ປາກລິນເຕີນບໍ່ພໍໃຈຕໍ່ງານແຕ່ງດອງທີ່ຈະມີຂຶ້ນຂອງທ່ານ ປາກລິນເຕີນ. ຖ້າທ່ານ ລໍເດີ ບໍ່ເອົາເມຍ ແລະເມື່ອຈຸຕິມໍລະນາໄປໂດຍບໍ່ໄດ້ມີລູກໄວ້ຈັກຄົນແລ້ວ ແມັກແລ້ງ, ຜູ້ເຊິ່ງຫິວກະຫາຍຄວາມມັກໃຫຍ່ໃຝ່ສູງນັ້ນກໍຈະໄດ້ເປັນຜູ້ສືບທອດນາມມະຍົດ ລໍເດີ ປາກລິນເຕີນ, ເປັນເຈົ້າຂອງພາສາດໂອນມາອູນ ແລະເປັນຜູ້ຊົມໃຊ້ຊັບສິນສົມບັດທຸກຢ່າງ. ການສ້າງຄອບຄົວຂອງທ່ານ ລໍເດີ ນັ້ນ ຈະທຳລາຍແຜນການທຸກຢ່າງຂອງ ແມັກແລ້ງ. ຍ້ອນແນວນັ້ນມັນຈຶ່ງໃຊ້ທຸກວິທີການເພື່ອທຳລາຍງານວິວາຫະມຸງຄຸນຂອງທ່ານ ປາກລິນເຕີນ.

ໃນຂະນະດຽວກັນນັ້ນ, ທ່ານ ລໍເດີ ປາກລິນເຕີນ ໄດ້ທຳການຄົ້ນຄິດປະດິດສ້າງທີ່

ແຫລມຄົມຂຶ້ນມາຢ່າງຫນຶ່ງ. ປະດິດຫຍັງຂຶ້ນມາ, ພໍ່ຂອງຂ້າພະເຈົ້າກໍບໍ່ຮູ້. ແຕ່ເພື່ອເປັນການທົດສອບຄືນ, ທ່ານ ລໍເດີ ປາກລິນເຕີນ ຕ້ອງການດຳເນີນການທົດລອງຢູ່ໃນຮ່າງກາຍຂອງມະນຸດ. ເພິ່ນໄດ້ສະເຫນີໄປຍັງລັດຖະບານໃຫ້ມອບຕົວບັນດານັກໂທດຖືກປະຫານໃຫ້ເພິ່ນ, ຫລືບໍ່ກໍອະນຸມັດໃຫ້ເພິ່ນຈ້າງຄົນເພື່ອນຳມາໃຊ້ເຂົ້າໃນການທົດລອງດັ່ງກ່າວ. ເຖິງແມ່ນວ່າຂໍ້ສະເຫນີຈະມີເຫດມີຜົນພຽງພໍແລະໄດ້ສົ່ງໄປຢ່າງປົດລັບທີ່ສຸດກໍຕາມ, ແຕ່ກໍບໍ່ຈັກວ່າຍ້ອນຫຍັງຊາວບ້ານຊາວເມືອງທີ່ຢູ່ອ້ອມຂ້າງຂອງພາສາດ ໂອນມາຊູນ ຈຶ່ງສາມາດຮູ້ເລື່ອງນີ້ໄດ້. ຄົນຢູ່ ເວສະລີແລະ ແອຊູໂອເຣີ ນັບເປັນສິບໆຄົນໄດ້ແຫ່ກັນມາຫຸ້ມລອມຫ້ອງການຂອງພາສາດ, ແລະສະເຫນີມອບຮ່າງກາຍຂອງຕົນເອງໃຫ້ແກ່ການທົດລອງດັ່ງກ່າວ.

- ເຂົາເຈົ້າຕຽມພ້ອມຍິນຍອມທຸກຢ່າງ, - ພໍ່ຂ້າພະເຈົ້າເວົ້າ. - ບັນດາຂ່າວອະກຸສົນຕ່າງໆໄດ້ຖືກເລົ່າລືແຜ່ລາມອອກໄປຍັງກຸ່ມຊາວບ້ານທ້ອງຖິ່ນ. ເຂົາເຈົ້າເວົ້າວ່າທ່ານ ລໍເດີ ຕ້ອງການຕີນແລະມືຂອງມະນຸດແລະປະກົດວ່າລຸງ ແຮັດຍີ ໄດ້ເສຍມືເບື້ອງຂວາໄປນັ້ນບໍ່ແມ່ນຢູ່ກາລີໂປລີ ແຕ່ມັນແມ່ນຍ້ອນຂາຍໃຫ້ທ່ານ ລໍເດີ. ຍິ່ງໄປກວ່ານັ້ນ ເຂົາເຈົ້າຍັງເວົ້າວ່າພໍ່ເປັນພໍ່ສື່ໃຫ້ແກ່ກິດຈະການດັ່ງກ່າວ. ນັ້ນມັນເປັນເລື່ອງເສກສັນປັ້ນແຕ່ງແບບໂງ່ໆວ. ແຕ່ ເຊມຸຍແອນເອີຍ, ຈຳເປັນຈະຕ້ອງເຂົ້າໃຈຄົນທົ່ວໄປ. ພວກທີ່ໄປພາສາດນັ້ນ ເວົ້າແລ້ວກໍແມ່ນເພື່ອຫາເງິນ! ແມ່ນແລ້ວລູກເອີຍ, ພໍ່ໄດ້ສູ້ທົນຕໍ່ເວລານາທີອັນເຄັ່ງຕຶງນັ້ນບໍ່ຈັກວ່າເທົ່າໃດ ເພື່ອໂອ້ລົມກັບຜູ້ຄົນທີ່ຍາກຈົນເຫລົ່ານັ້ນ. ບັນຫານີ້ເກີດຂຶ້ນພໍເຫມາະກັບເວລາທີ່ເຂົາເຈົ້າພວມໄລ່ກຳມະກອນອອກຈາກງານຢູ່ເວສະລີ. ແຕ່ພໍ່ຂໍສາບານວ່າ, ບໍ່ມີໃຜຈັກຄົນບໍ່ມີໃຜເລີຍ, ທີ່ຖືກນຳເຂົ້າໄປທົດລອງຢູ່ໃນພາສາດ. ດຽວນີ້ລູກລອງຄາດຄິດເອົາເບິ່ງດູ, ຖ້າວ່າ ສະພາລັດຖະມົນຕີຊາບເລື່ອງຕ່າງໆເຫລົ່ານັ້ນ ແລ້ວຈະເປັນແນວໃດ? ແນ່ກແລ້ງ ພ້າວສວຍໃຊ້ໂອກາດນີ້ທັນທີ. ມີຄົນຫວ່ານຂ່າວອອກມາວ່າ ທ່ານລໍເດີ ປາກລິນເຕີນ ໄດ້ດຳເນີນການທົດລອງຜ່າຕັດຮ່າງກາຍຂອງຄົນທີ່ຍັງມີຊີວິດຢູ່. ພໍ່ໄດ້ຕຽມອົກຕຽມໃຈໄວ້ເພື່ອສາບານຕໍ່ຫນ້າສານແລ້ວວ່ານັ້ນເປັນເລື່ອງຂີ້ຕົວະ.

- ແຕ່ທ່ານ ລໍເດີ ເອງຕ້ອງເປີດຫນ້າກາກຂອງຜູ້ຕູ່ຫາດີ! - ຂ້າພະເຈົ້າຮ້ອງຂຶ້ນ.

- ບໍ່, ເຊມຸຍແອນ ເອີຍ, ລູກບໍ່ເຂົ້າໃຈ ທ່ານ ລໍເດີຈັກຫນ່ອຍເລີຍ. ເພິ່ນຖືວ່າການ

ໂອ້ລົມກັບຄົນຢ່າງ ແມັກແລ້ງນັ້ນເປັນເລື່ອງເສຍກຽດ. -ພໍ່ຂອງຂ້າພະເຈົ້າແຫວມືອອກໄປທາງໜ້າ. -ແລ້ວມື້ວານນີ້ສຽງຟ້າຜ່າກໍດັງລັ່ນຂຶ້ນ. ຢູ່ທີ່ສະພາ, ແມັກແລ້ງ ໄດ້ນຳໃຊ້ດຳລັດສະບັບໜຶ່ງ, ໂດຍອີງໃສ່ດຳລັດດັ່ງກ່າວ, ທ່ານ ລໍເດີ ປາກລິນເຕີນຂອງພວກເຮົາຖືກບິດຍຶດບັນດາສັກອັນສູງສົ່ງ, ສູນເສຍກຳມະສິດໃນການສືບທອດແລະຖືກເນລະເທດອອກໄປຈາກດິນແດນແຫ່ງລາຊະອານາຈັກນີ້.

-ແຕ່ແບບນີ້ມັນຂີ້ສູດທີ່ສຸດ! ມັນບໍ່ຍຸຕິທຳຈັກໜ້ອຍເລີຍ! -ຂ້າພະເຈົ້າແຄ້ນ, ຮູ້ສຶກເໝືອນດັ່ງວ່າ ມີວັດຖຸແຂງໆເປັ ນມະຫາລູດຕູດຕິດພວມພຸ່ງຂຶ້ນມາຕັນຄໍຫອຍຂອງຂ້າພະເຈົ້າ.

ພໍ່ເອົານ້ຳໃຫ້ຂ້າພະເຈົ້າຈອກໜຶ່ງ.

-ພໍ່ຮູ້ດີວ່າ ເລື່ອງນີ້ຈະເຮັດໃຫ້ລູກໂສກເສົ້າກັງວົນລູກເອີຍ... ມື້ອື່ນຈິ່ງເວົ້າເລື່ອງນີ້ຕໍ່ອີກ.

-ບໍ່, ບໍ່... -ຂ້າພະເຈົ້າເວົ້າແບບອັບອຶ້ງແລະເກງວ່າຕົນເອງຈະໄຫ້ກ້າກຂຶ້ນຕໍ່ໜ້າພໍ່ຄືກັບເດັກນ້ອຍແມ່ຍິງຄົນໜຶ່ງ, ຊຶ່ງເຫດການນີ້ມັນບໍ່ເໝາະສົມກັບບ່າວນ້ອຍຜູ້ທີ່ໄດ້ສຳເລັດການສຶກສາຊັ້ນເອກຈາກວິທະຍາໄລ ດີຢ່າງຈັກໜ້ອຍເລີຍ. -ພໍ່ເວົ້າອອກມາໝົດທຸກສິ່ງທຸກຢ່າງສາ, ເວົ້າແມ້ພໍ່! ... ເວົ້າສາ!

ພໍ່ຂອງຂ້າພະເຈົ້າຍິ້ມຫົວ.

-ຖ້າລູກຫາກຂັດຂ້ອງຂຶ້ນມາແລ້ວ ພໍ່ຈະມອດຕະກຽງແລ້ວໜີປະໃດ.

ເລື່ອງນີ້ເຄີຍໃຊ້ເປັນການລົງໂທດຂ້າພະເຈົ້າແຕ່ຍັງເປັນເດັກນ້ອຍ, ໃນເມື່ອຂ້າພະເຈົ້າຂັດແອ່ວບໍ່ຍອມໄປນອນ. ຂະນະນັ້ນ ພວກຂ້າພະເຈົ້າຕ່າງກໍໄດ້ຫວນຄຶດເຖິງເລື່ອງນີ້ແລ້ວ ຂ້າພະເຈົ້າກໍເລີຍຍິ້ມຫົວ.

-ພໍ່ຈົ່ງອະໄພໃຫ້ລູກແດ່ເທາະ. ແຕ່ພໍ່ໄດ້ເລົ່າເລື່ອງທີ່ມັນຫວາດສຽວໃຫ້ລູກຟັງ. ບໍ່ໜ້າເປັນຈັ່ງຊັ້ນໄປໄດ້! ...

-ສະພາອາດຈະສາມາດເຮັດໝົດທຸກສິ່ງທຸກຢ່າງ, -ພໍ່ຂ້າພະເຈົ້າຕອບ, ເພິ່ນພະຍາຍາມກົດສຽງໃຫ້ເຄັ່ງຂຶມ, ແຕ່ຂ້າພະເຈົ້າຮູ້ສຶກວ່າມັນມີວາດເຍາະເຍີ້ຍຢ່າງທີ່ຂ້າພະເຈົ້າບໍ່

ເຄີຍພົບເຫັນມາກ່ອນເລີຍ. - ເຂົານໍາເອົາກົດບັນຍັດເຊິ່ງມີປະສິດທິພົນຕໍ່ສະເພາະແຕ່ກໍລະນີຂອງທ່ານ ລໍເດີເອງເທົ່ານັ້ນ. ມື້ນີ້, ເລື່ອງນີ້ ໄດ້ແຜ່ລາມໄປທົ່ວ ໂອນມາອູນ ແລ້ວ. ມື້ໜ້າ, ທົ່ວເມືອງແອຊູໂອເຣີ ແລະທົ່ວທັງໂລກກໍຈະຮູ້...

-ພໍ່, ຄັນຊັ້ນປະຈຸບັນນີ້ ທ່ານ ລໍເດີ ປາກລີນເຕີນ ເປັນຈັ່ງໃດໄປແລ້ວ? - ຂ້າພະເຈົ້າຖາມ.

ພໍ່ຂອງຂ້າພະເຈົ້າບໍ່ໄດ້ຕອບທັນທີໂລດ, ຫລັງຈາກນັ້ນ ເພິ່ນກໍເວົ້າຢ່າງຊຶບຊຶມແລະຫງ່ວມເຫງົາວ່າ:

-ກ່ອນໜ້ານີ້ບໍ່ພໍເທົ່າໃດຊົ່ວໂມງ, ທ່ານ ລໍເດີໄດ້ຈາກ ໂອນມາອູນ ໄປ. ທ່ານ ເຊີຍເຕີນ, ຊຸນທະບຽນສານແຫ່ງພະລາຊະອານາຈັກໄດ້ປິດປະຕູຫ້ອງສ່ວນຕົວຂອງທ່ານ ປາກລີນເຕີນ ທຸກໆຫ້ອງ. ຮອດມື້ອື່ນ, ທ່ານ ລໍເດີໃຫມ່ ກໍຈະມາຢູ່ຜາສາດນັ້ນ, ເຂົາຄືແມັກແລັງ, ຜູ້ສືບທອດທີ່ຖືກຕ້ອງຕາມກົດຫມາຍໃນປະຈຸບັນນີ້. ເລື່ອງທຸກຢ່າງມັນເປັນຈັ່ງຊັ້ນແລ້ວລູກເອີຍ. ຫາກແມ່ນລູກສາມາດຮູ້ໄດ້ວ່າພໍ່ອຶດເມື່ອຍໄປຍ້ອນເລື່ອງທຸກຢ່າງເຫລົ່ານັ້ນຄືແນວໃດແລ້ວ...

## IV

ຫລັງຈາກນັ້ນສອງສາມມື້, ເຈົ້າຂອງຜາສາດຜູ້ໃຫມ່ກໍເລີ່ມຕົ້ນເຂົ້າມາຄຸ້ມຄອງວັດກຸສົມບັດ, ແລະໃນຂະນະດຽວກັນນັ້ນ, ພໍ່ຂອງຂ້າພະເຈົ້າໄດ້ບອກຂ່າວທີ່ບໍ່ຄ່ອຍຈະດີໃຫ້ຮູ້ວ່າ: ຂ້າພະເຈົ້າບໍ່ມີສິດສືບຕໍ່ການສຶກສາທີ່ວິທະຍາໄລ ດີຢັງ ອີກ. ແມັກແລັງ ໄດ້ປະຕິເສດຕໍ່ພໍ່ຂອງຂ້າພະເຈົ້າໃນການທີ່ຈະສົ່ງເງິນອຸດຫນູນການສຶກສາໃຫ້ແກ່ຂ້າພະເຈົ້າ. ມັນຄືງແມ່ນບາດຄ້ອນຫນັກຫນ່ວງປານຟ້າຜ່າອັນຫນຶ່ງແທ້ຈິງ. ຂ້າພະເຈົ້າບໍ່ກ້າຈະແນມຫນ້າອອກສູ່ຂ່ວງຄຸ້ມອີກ. ໃຜໆກໍຫົວເຍາະເຍີ້ຍຂ້າພະເຈົ້າ. ພວກຮຸ່ນຮາວຄາວດຽວກັນກໍຫຍໍ້ຫຍັນທໍາໃຫ້ຂ້າພະເຈົ້າຕ້ອງຫນ້າແດງຂຶ້ນຍ້ອນຄວາມອັບອາຍແລະເຈັບແຄ້ນ.

ມີເທື່ອຫນຶ່ງ, ລຸງ ແຮັດຍີ ເວົ້າກັບຂ້າພະເຈົ້າໃນຂະນະທີ່ ນັ່ງຢູ່ໃກ້ບ່ອງຢ້ຽມດ້ວຍອາລົມອັນມືດມົນທີ່ສຸດ:

- ຫລານເອີຍ, ຈະຕ້ອງຢືນຢູ່ດ້ວຍລຳແຂ່ງຂອງຕົນເອງ.

ໃນຂະນະທີ່ເພິ່ນຂົດກັບຂົດຢ່າງລຽນຕິດເພື່ອຈູດກອກທີ່ມອດເລື້ອຍໆນັ້ນ, ລຸງຂອງຂ້າພະເຈົ້າເວົ້າເກືອງທ່ານ ລໍເດີ ຢ່າງບໍ່ຈິງບໍ່ຍອມດ້ວຍຄວາມໂມໂຫວ່າ:

- ຫລານເອີຍ, ລາວບໍ່ໄດ້ເປັນເດືອດເປັນຮ້ອນຈັກໜ້ອຍເລີຍ ໃນການທີ່ລາວໄດ້ເຮັດໃຫ້ຫລານຕ້ອງຄ້າງໂຄກຢູ່ແບບນີ້. ສ່ວນລຸງແລະພໍ່ຫລານນັ້ນກໍບໍ່ມີແຮງພໍທີ່ຈະລາກແກ່ເຮືອພວງເພື່ອນຳເອົາຫລານໄປສູ່ຝັ່ງທີ່ສະຫງົບງຽບນັ້ນໄດ້. ມະນຸດຜູ້ມີນ້ຳໃສໃຈດີນັ້ນ ໄດ້ຫາຍລັບອອກໄປຈາກຂອບຟ້ານີ້ແລ້ວ. ມື້ນີ້, ຢູ່ທີ່ຮ້ານອາຫານ "ລາຊາເສືອ" ເຂົາເຈົ້າເລົ່າລືກັນວ່າລາວໄດ້ໃຊ້ຫນີ້ຊີວິດຢ່າງຮຽບຮ້ອຍແລ້ວ. ລຸງກໍບໍ່ຈຳເປັນຈະຂັດຂວາງ...

- ລຸງຢ່າເວົ້າແບບນັ້ນໃຫ້ແກ່ຜູ້ທີ່ໄດ້ມີບຸນຄຸນຕໍ່ພວກເຮົາແມ້, - ຂ້າພະເຈົ້າເວົ້າຂັດຂຶ້ນ.

ລຸງຂອງຂ້າພະເຈົ້າປ່າຍມືປະຕິເສດດ້ວຍມືເບື້ອງດຽວທີ່ຍັງເຫລືອຢູ່ຂອງເພິ່ນ ເຊິ່ງໃນຂະນະນັ້ນພວມກືກອກຢູ່.

- ເຊມຸຍແອນ, ຫລານຕ້ອງແນມເບິ່ງຊີວິດຢ່າງກົງໄປກົງມາໂລດ, ຢ່າຢ້ານຄວາມຈິງຈັກເທື່ອ. ປະຈຸບັນນີ້, ຫລານຕ້ອງຫມູນໃຊ້ສອງຝາມືຂອງຕົນໃຫ້ເປັນປະໂຫຍດແກ່ຊີວິດ, ນັ້ນແມ່ນຄວາມຈິງ. ຫລານຈິ່ງເຮັດແນວໃດໃຫ້ພວກທ່ານ ຕຸ້ຍຫມຸດຫລຸດທີ່ຫນ້າເຄົາລົບນັບຖືເຊິ່ງພວມນັ່ງສະເມີ້ຍເຄີ້ຍຢູ່ໃນຫ້ອງການຕ່າງໆຂອງເມືອງ ແອຊູໂອເຣີ ນີ້ຫຍັບເຂົ້າຫາກັນອີກຈັກຫນ້ອຍ. ຈິ່ງເຮັດໃຫ້ເຂົາເຈົ້າສະຫລະບ່ອນຍືນອັນໃດອັນຫນຶ່ງຢູ່ພາຍໃຕ້ແສງສະຫວ່າງແຫ່ງດວງອາທິດນີ້ໃຫ້ແກ່ຫລານ. ໃບປະກາດສະນີຍະບັດຂອງວິທະຍາໄລ ດີຍັງ. ມັນມີຄຸນຄ່າຢູ່ດວ່າ!

ກືກແລ້ວ, ຈຳເປັນຈະຕ້ອງໄດ້ສ້າງເນື້ອສ້າງຕົວ. ຂ້າພະເຈົ້າໄດ້ເຫັນກັບຕາແລ້ວວ່າປະກາດສະນີຍະບັດຈິບຊຸ່ນ ກໍຄືຄຳຢັ້ງຢືນອັນດີງາມຕ່າງໆຂອງວິທະຍາໄລ ດີຍັງ ມັນບໍ່ມີປະສິດທິພາບພຽງພໍທີ່ຈະແລກກາເຟຈອກຫນຶ່ງພ້ອມທັງເຄື່ອງອຸ່ນທ້ອງຕອນເຊົ້າ, ອາຫານທ່ຽງທີ່ແຊບໆນົວໆ, ອາຫານແລງທີ່ອີ່ມຫນຳສຳລານ, ຫລືຢາສູບຫອມຊອງຫນຶ່ງ, ຫລືແມ້ແຕ່ພື້ນເກີບແລະສິ່ງມະລິດປິດປີທີ່ລຳຄານໃຈອື່ນໆ. ແຕ່ແລ້ວ ສິ່ງເຫລົ່ານັ້ນຊໍ້າເປັນສິ່ງຈຳເປັນຊຶ່ງຂ້າພະເຈົ້າຊິນເຄີຍມາແລ້ວໃນໂຮງຮຽນກິນນອນ ດີຍັງ ແລະໃນເຮືອນຂອງເພື່ອນ ໂຣເບີດ.

ຂ້າພະເຈົ້າໄດ້ໄປຍັງສຳນັກງານອົງການຕ່າງໆທົ່ວຕົວເມືອງ ແອຊູໂອເອີ ແລະ ເວສະລີ ເພື່ອຫາງານທຳຢ່າງເປົ່າປະໂຫຍດ. ປະກົດວ່າໃນລາຊະອານາຈັກນີ້ມີ ພວກພະນັກງານໃນຫ້ອງທົດລອງ, ເລຂານຸການແລະ ນະຫາດເລັກກົມເກີນໄປ. ພາຍໃຕ້ແສງອາທິດແຫ່ງບ້ານເກີດເມືອງນອນນີ້ ຂ້າພະເຈົ້າບໍ່ສາມາດຊອກໄດ້ແມ້ແຕ່ຫມ້ອງຫນຶ່ງນ້ອຍໆສຳລັບຕົນເອງເລີຍ.

ທັງເມື່ອຍອ່ອນແລະວິຕົກກັງວົນ, ຂ້າພະເຈົ້ານັ່ງຢູ່ເຮືອນຕັ້ງເປັນຊົ່ວໂມງ, ຈົມເລິກຢູ່ໃນຄວາມຄຶດອັນຂົມຂື່ນ.

ຕ້ອງຕັດສິນໃຈຢ່າງເດັດຂາດ ຂ້າພະເຈົ້າບໍ່ອາດທີ່ຈະດຳລົງຊີວິດແບບເກາະຫ້ອຍຢູ່ກັບພໍ່ແລະລໍຖ້າບຸນແລ່ນທັນ. ພໍ່ຂອງຂ້າພະເຈົ້າກໍຕ້ອງເປັນກຳເປັນເວນໄປຍ້ອນ! ເພິ່ນໄດ້ວິງວອນຮ້ອງຂໍນຳທ່ານ ເຊີຍເຕີນ ເພື່ອໃຫ້ເພິ່ນຮັບເອົາຂ້າພະເຈົ້າເຂົ້າເປັນພະນັກງານຫ້ອງການ. ແຕ່ ຂຸນທະນຽນສານພຽງແຕ່ ເບະສິບ ແມ່ນຫຍັງ? ພັດຊິໄປພົວພັນກັບຊາຍຫນຸ່ມຜູ້ຫນຶ່ງເຊິ່ງທ່ານ ລໍເດີເກົ່າ, ຜູ້ເຊິ່ງຖືກເນລະເທດອອກຈາກໂອນມາອູນ ຢ່າງອັບອາຍຂາຍຫນ້າ, ໃຫ້ຄວາມອຸປະການມານັ້ນຫວະ? ບໍ່, ເພິ່ນບໍ່ຍິນຍອມຮັບເອົາຂ້າພະເຈົ້າເຂົ້າໄປເຮັດວຽກນຳເກີງແມ່ນວ່າຈະຕ້ອງຈ່າຍເງິນເດືອນພຽງເຄິ່ງດຽວເທົ່ານັ້ນ ເພິ່ນກໍຍັງບໍ່ຈ້າງ.

ສ່ວນ ຂ້າພະເຈົ້າແມ່ນບໍ່ຮູ້ວ່າຈະເອົາຕົວລອດຈາກສະພາວະການນັ້ນໄດ້ດ້ວຍວິທີໃດຊ້ຳ. ຂ້າພະເຈົ້າບໍ່ສາມາດຈະຝາກຄວາມຫວັງໄວ້ນຳການຊ່ວຍເຫລືອຂອງທ່ານ ລໍເດີ ໄດ້ອີກແລ້ວ, ກະເສີນວ່າຊິຝາກຄວາມຫວັງໄວ້ກັບພໍ່, ພໍ່ກໍໄດ້ໃຊ້ຈ່າຍເພື່ອຂ້າພະເຈົ້າທຸກຢ່າງທີ່ເພິ່ນມີຢູ່. ບັດນີ້ ຂ້າພະເຈົ້າຈະຕ້ອງຊິດຊ່ວຍພໍ່.

ຂ້າພະເຈົ້າຍັງສ້າງຄວາມຫວັງໄວ້ຢູ່ວ່າ ທ່ານຜູ້ອຳນວຍການວິທະຍາໄລ ດີຍັງ ແລະກຸ່ມຄູ-ອາຈານທີ່ນັ້ນຄົງຊອກຫາລ່ອງທາງຊ່ວຍຂ້າພະເຈົ້າໃຫ້ໄດ້ມີໂອກາດຮຽນຫ້ອງສູງຕໍ່ໄປ. ຂ້າພະເຈົ້າໄດ້ຂຽນຈົດຫມາຍຂໍຄວາມຊ່ວຍເຫລືອສະບັບຫນຶ່ງໄປຍັງທ່ານ ຜູ້ອຳນວຍການ. ແຕ່ບໍ່ໄດ້ຮັບຈົດຫມາຍຕອບມາເລີຍ.

ຍຸກສະໄຫມນັ້ນ, ຊາວຫນຸ່ມຍິງຊາຍພວກຂ້າພະເຈົ້າມີຄວາມຫຍຸ້ງຍາກບໍ່ຫນ້ອຍເພື່ອຈະຊອກຫາບ່ອນທີ່ພວກຂ້າພະເຈົ້າຈະນຳໃຊ້ຄວາມສາມາດ ແລະຄວາມພຽນພະຍາຍາມໄດ້ຢ່າງມີຜົນ. ຜູ້ຫວ່າງງານສ່ວນຫລວງຫລາຍມືວຽກເຮັດແຕ່ພຽງຢ່າງດຽວຄືເລາະຫລິ້ນໄປຕາມກະ

ຫນິນຫີນທາງດ້ວຍຄວາມຫວັງທີ່ຈະສາມາດຊອກໄດ້ເງິນ, ແມ້ແຕ່ຫລຽນນ້ອຍໆກໍຕາມ. ແຕ່ຕາມທຳມະດາແລ້ວ ເງິນກໍບໍ່ສູ້ຈະເຮ່ຍຊະຊາຍຢູ່ຕາມກະຫນິນ. ແຕ່ການຊອກຫາເງິນເຮ່ຍຢູ່ຕາມກະຫນິນນັ້ນຍັງສາມາດເປັນໄປກ່ວາການໄປຊອກຫາວຽກເຮັດງານທຳນັ້ນອີກ.

ຍາມໃດຂ້າພະເຈົ້າກໍຄຶດຫາວິທີການຕ່າງໆ ເຊິ່ງຈະສາມາດຊ່ວຍໃຫ້ຂ້າພະເຈົ້າຕັ້ງຕົນຕັ້ງໂຕໄດ້. ມີເທື່ອຫນຶ່ງຂ້າພະເຈົ້າກໍຄຶດວ່າ ແອເດີ ອາດຈະສະເຫນີກັບອີ່ຕາເກົ້າ ອິກພີ ເພື່ອໃຫ້ຮັບເອົາຂ້າພະເຈົ້າເຂົ້າເຮັດວຽກລ້າງແກ້ວ ແລະຫລອດຢາໃນຮ້ານຂາຍຢາ. ແຕ່ນັກຮຽນວິທະຍາໄລ ດີຍັງ ຜູ້ຫນຶ່ງທີ່ມີໃບປະກາດສະນີຍະບັດຈະມາເປັນຄົນລ້າງແກ້ວແລະຫລອດຢາໃນຮ້ານຂາຍຢານັ້ນມັນເປັນເລື່ອງທີ່ຫນ້າຢາກຫົວທີ່ສຸດ. ແຕ່ອຸປະສັກທີ່ສຳຄັນກ່ວາຫມູ່ກ່ຽວກັບເລື່ອງນີ້ ແມ່ນຢູ່ບ່ອນວ່າ ແອເດີ ນັ້ນມັນເປັນຄົນລ້າງແກ້ວແລະຫລອດຢາໃນຮ້ານຂອງພໍ່ມັນເອງ, ມັນເຮັດວຽກທຳງານຢ່າງອົດສາພະຍາຍາມຢູ່ທາງຫລັງຕູ້ຢາຂອງພໍ່ມັນແລະເບິ່ງຊົງຄືຈັ່ງວ່າ ມັນຈະບໍ່ປ່ອຍໃຫ້ຜູ້ໃດໄປຍາດອາຊີບຂອງມັນໄດ້ເດັດຂາດ.

ຄວາມຄຶດຕ່າງໆເຫລົ່ານັ້ນເຮັດໃຫ້ຂ້າພະເຈົ້າເກີດຄວາມສິນລະອິນໃຈ.

"ຂ້າພະເຈົ້າຈະສາມາດຄົ້ນຄ້ວາສິ່ງໃດໃນຕົວເມືອງນ້ອຍແຫ່ງນີ້? ໃຊ້ຊີວິດຢູ່ແຫ່ງນີ້ກັບທ່ານອິກພີ, ທ່ານ ບຣິດ, ດອກເຕີ ພລົດແລະ ລຸງດັງແດງນັ້ນຕະຫລອດຊີວິດຫວະ?"

ຂ້າພະເຈົ້າສຳນຶກຂຶ້ນໃນມັນສະຫມອງເຖິງບັນດາພົນລະເມືອງ ທີ່ຫນ້າເຄົາລົບນັບຖືຂອງທ້ອງຖິ່ນ. ວິກາຣີ ພະສົງຄະປະທານແຫ່ງສາສະຫນາອີແອເຣມີອາ, ນັກເທສະຫນາທໍ່ຜູ້ຊຳນິຊຳນານ, ເປັນຜູ້ທີ່ມີຊື່ສຽງໃນເລື່ອງມັກກິນຂອງແຊບ. ທ່ານຫົວຫນ້າຫ້ອງການໄປສະນີໂກລີຕາບອດເບື້ອງຫນຶ່ງ, ຜູ້ເຊິ່ງລຳຄານເພາະມີລູກຫລາຍຄົນໃນຄອບຄົວ. ທ່ານຜູ້ພິພາກສາເວີຍສະເລີຍ, ເພື່ອນຊຸນທະບຽນສານຂອງ ເຊີຍເຕີນ, ພັນເອກ ແພຣັດເຊີນ ຜູ້ເຊິ່ງຖືກຂະຫນານນາມວ່າ "ນັກດື່ມຄໍທອງແດງ". ຄົນທຸກໆປະເພດຢູ່ ແອລູໂອເຣີໄດ້ປະກົດຕົວຂຶ້ນຕໍ່ຫນ້າຂອງຂ້າພະເຈົ້າ, ເປັນພຶງຫນຶ່ງນັບທັງພວກຫົວຫນ້າຫ້ອງການໄປສະນີຕ່າງໆ ແລະບັນດາເຈົ້າຂອງຮ້ານຂາຍຢາຫມົ້ນອອກມາຈາກເຕົາຜີງ, ຢືນຢ່າງຄັບຄາຫນາແຫນ້ນຢູ່ເຕັມຫ້ອງ. ເຂົາເຈົ້າອ້ອມລ້ອມເອົາຂ້າພະເຈົ້າ, ຂະຍິບຕາທຳສັນຍານໃຫ້ຂ້າພະເຈົ້າແລະພຶມພຳສິ່ງໃດສິ່ງຫນຶ່ງທີ່ເຫມືອນກັບວ່າເຍາະເຍີ້ຍສຽດສີ.

ຂ້າພະເຈົ້າຮູ້ສຶກຫວາດກົວ, ຂ້າພະເຈົ້າສະເດີດຂຶ້ນ.

ຂ້າພະເຈົ້າຈຳໄດ້ວ່າຂ້າພະເຈົ້າແລ່ນໄປຫາປ່ອງຢ້ຽມ, ໄຂລະອອກ. ຕອນນັ້ນຟ້າມືດແລ້ວ. ດອກໄຟເລີ່ມຮຸ່ງສະຫວ່າງຂຶ້ນໃນເຮືອນນ້ອຍຫລັງຕ່າງໆຢູ່ ແອຊູໂອເຣີ. ທີ່ເຮືອນຂ້າງຄຽງ, ຍາແມ່ວິນເທຢືນຢູ່ໃນສວນແລະເອີ້ນຂຶ້ນດັງໆ:

- ເມຣີ! ... ມຶງຫາຍຫົວໄປໃສແລ້ວ, ອີ່ພະຍົດ? ອີ່ເອດີ ເດ ມັນໄປໃສແລ້ວ?

ນ້ຳສຽງຂີ້ໄຫ້ຂອງ ເມຣີ ດັງແວ່ວມາ:

- ລູກບໍ່ຮຸ ... ຮູ້ ...

ຕ້ອງສາລະພາບວ່າ ສິ່ງຫນຶ່ງສິ່ງດຽວທີ່ຈ່ອງດຶງຂ້າພະເຈົ້າໄວ້ກັບ ແອຊູໂອເຣີ ໃນຂະນະນັ້ນແມ່ນນາງສາວ ເອດີ ວິນເທ.

ເຮືອນຫລັງນ້ອຍໆຂອງເຂົາເຈົ້າຢູ່ໃກ້ໆເຮືອນຂ້າພະເຈົ້າຫັ້ນ. ພໍ່ຂອງ ເອດີເຮັດວຽກຢູ່ຫ້ອງການໄປສະນີທີ່ຂຶ້ນກັບອຳນາດຂອງໂກລີ. ເພິ່ນເປັນພະຍາດເຈັບຫົວໃຈ ແລະປະກົວວ່າບໍ່ຄ່ອຍອອກໄປທາງນອກພໍເທົ່າໃດ. ບາງຄັ້ງຄາວຂ້າພະເຈົ້າແນມເຫັນເພິ່ນຢູ່ໃນສວນນ້ອຍຂ້າງເຮືອນ. ເພິ່ນນັ່ງຢູ່ເທິງຕັ່ງອີຫວາຍ, ປະມືອັນຈ່ອຍຜອມທັງສອງເບື້ອງໄວ້ເທິງຫົວເຂົ່າແລະແນມເບິ່ງທິວທັດມະຫາສະຫມຸດ ທີ່ປະກົດຕົວຂຶ້ນ ເປັນເສັ້ນນ້ອຍໆຢູ່ຕິດຂອບຟ້າພຸ້ນດ້ວຍຄວາມໂສກເອາວອນ. ແອດີ ເລົ່າວ່າຊາຍຊະລາ ວິນເທພວມທ້ອນເງິນເພື່ອຈະໄປສູ່ແຫ່ງໃດແຫ່ງຫນຶ່ງທີ່ຢູ່ທິດໃຕ້ສຸດພຸ້ນ.

ຂ້າພະເຈົ້າຈື່ໄດ້ວ່າ, ມີຄັ້ງຫນຶ່ງເຊິ່ງເປັນວັນທິດ, ແມ່ເຖົ້າ ໂອລີວີອາ ພາຂ້າພະເຈົ້າໄປໂບດ. ພາຍຫລັງໄຫ້ວພະສູດມົນແລ້ວ, ແມ່ເຖົ້າຂອງຂ້າພະເຈົ້າກໍມາຢືນລົມກັບພວກແມ່ຍ່າແມ່ຍິງຢູກາງເດີ່ນ. ໃພງກໍລ້ວນແຕ່ມີດຽງບຢູ່ດ້ວຍຄວາມເຄົາລົບນັບຖືຍິ່ງ ເມື່ອພະສັງຄະປະທານ ອີແອເຣມີອາ ກ້າວອອກມາແຕ່ໃນໂບດ. ຄຸນພໍ່ຍ່າງມາກັບຍາແມ່ ວິນເທ ແລະ ນາງສາວຈ່ອຍຜອມຜູ້ຫນຶ່ງທີ່ສຸບຫມວກເພືອງໃບມົນເອ້ດ້ວຍແຖບຜ້ານ້ອຍສອງອັນ.

_ ຢ່າຟ້າວເສຍກຳລັງໃຈ ຍາແມ່ ວິນເທທີ່ຮັກແພງເອີຍ, - ຄຸນພໍ່ເວົ້າຢ່າງອ່ອນຫວານ. - ອັດຕະມາ ເຊື່ອຫມັ້ນວ່າຜີວຂອງຍາແມ່ຈະກັບສູ່ສະພາບປົກກະຕິ. ອັດຕະມາໄດ້ບອກໃຫ້

ທ່ານຫມໍພລິດເອົາໃຈໃສ່ເປັນພິເສດຕໍ່ຄົນເຈັບຜູ້ນີ້ແລ້ວ. ນາງຢ່າເປັນຫ່ວງກັບກ້ອນເງິນທີ່ຈະຕ້ອງໃຊ້ຈ່າຍ, ຄອມມູນຂອງໂບດເຮົາຮັບຮອງຈະທົດແທນລາຍຈ່າຍທຸກຢ່າງໃຫ້.

- ຂອບພະຄຸນ, ຂໍເດຊະແດ່ພະສັງຄະປະທານ, - ຍາແມ່ ວິນເທ ກ່າວດ້ວຍຄວາມຕື້ນຕັນໃຈ. - ຂ້າບາດມີຄວາມທຸກທໍລະມານຂົມຂື່ນຢ່າງຍິ່ງ ... ເພາະຍັງມີລູກນ້ອຍຢູ່ສອງຄົນ ...

- ອາດຕະມາເຂົ້າໃຈດີ, ພັນທະຂອງພວກເຮົາແມ່ນຕ້ອງເບິ່ງແຍງປົວລະບັດພວກເຂົາ. ຈົ່ງກ້າຫານ.

ຫລັງຈາກນັ້ນ ແມ່ເກົ້າ ໂອລີວີອາ ເວົ້າກັບຂ້າພະເຈົ້າ:

- ເຊມຸຍແອນ, ຫລານຄວນທັກທາຍ ເອດີ ແດ່. ບໍ່ວ່າຕີຫລານຈະບໍ່ຈຳນາງ?

ພວກຂ້າພະເຈົ້າທັງສີ່ຄົນພ້ອມກັນກັບບ້ານ. ແມ່ເກົ້າ ໂອລີວີອາ ໄດ້ກ່າວເພື່ອໃຫ້ຄວາມອົບອຸ່ນແກ່ນາງ ວິນເທ, ສ່ວນຂ້າພະເຈົ້າແລະນາງ ເອດີ ນັ້ນ ຍ່າງໄປກ່ອນ. ຂ້າພະເຈົ້າຮູ້ວ່າພໍ່ຂອງນາງພວມປ່ວຍແລະເຮັດໃຫ້ຂ້າພະເຈົ້າຮູ້ສຶກມີຄວາມສົງສານນາງເປັນຢ່າງຍິ່ງ.

ຂ້າພະເຈົ້າສັງເກດເຫັນວ່າ ເອດີຮັກແພງພໍ່ແລະນາງພວມຜ່ານຜ່າເວລານາທີອັນຫນັກຫນ່ວງກ່ຽວກັບການເຈັບປ່ວຍຂອງພໍ່.

ມື້ນັ້ນ ແມ່ເກົ້າ ໂອລີວີອາ ໄດ້ປຸງແຕ່ງອາຫານທ່ຽງ ແລະບອກໃຫ້ຂ້າພະເຈົ້າເອົາອາຫານເຍື່ອງຫນຶ່ງທີ່ແຊບທີ່ສຸດໄປຕ້ອນຄອບຄົວ ວິນເທ.

- ເຊມຸຍແອນ ເອີຍ, ກ້າຫລານໄປຢ້ຽມຢາມຄົນປ່ວຍ ຫມາຍຄວາມວ່າຫລານໄດ້ປະພຶດດີຢ່າງຫນຶ່ງ, - ແມ່ເກົ້າ ໂອລີວີອາ ເວົ້າແບບສັ່ງສອນ, ພ້ອມທັງໃຊ້ແພມົນນ້ອຍຫໍ່ຫຸ້ມຈານອາຫານນັ້ນໄວ້.

ຂ້າພະເຈົ້າໄປຍັງເຮືອນຂອງຍາພໍ່ຍາແມ່ ວິນເທ, ນັບແຕ່ມື້ນັ້ນ, ຂ້າພະເຈົ້າກໍເລີ່ມມີຄວາມສະນິດສະຫນົມກັບເຂົາເຈົ້າ, ຄວາມສະນິດສະຫນົມນັ້ນຜູກພັນກັນຢ່າງແຫນ້ນແກ່ນກ່ວາຄວາມລຶ້ງເຄີຍທຳມະດາສາມັນຂອງຊາວບ້ານທົ່ວໄປ. ມື້ນັ້ນ ເອດີ ອອກມາສົ່ງຂ້າພະເຈົ້າຮອດປະຕູສວນແລະເວົ້າວ່າ:

- ອ້າຍ ເຊມຸຍແອນ ເອີຍ, ອ້າຍດີຫລາຍ, ນ້ອງຈະບໍ່ລືມ, ບໍ່ລືມການມາຢ້ຽມຢາມນີ້ຈັກເທື່ອ.

ຂ້າພະເຈົ້າເວົ້າຫຍັງບໍ່ອອກເລີຍ, ຂ້າພະເຈົ້າມີຄວາມກະຕຸ້ນໃຈຢ່າງຍິ່ງເພາະມີຄົນເວົ້າວ່າຂ້າພະເຈົ້າເປັນຄົນດີ.

ພວກເຮົາເຄີຍຫລິ້ນ ໂກຣເກ* ນຳກັນຢູ່ເທິງເດີ່ນນ້ອຍ. ຂ້າພະເຈົ້າເຕັມໃຈເປັນຝ່າຍເສຍເກມໃຫ້ແກ່ ເອດີ ແລະມີຄວາມຊື່ນໃຈໃນເມື່ອເຫັນນາງຕົບມືຊົມເຊີຍໄຊຊະນະ. ຂ້າພະເຈົ້າມັກນຶກໄສລ່າເລື່ອງຂອງນາງສາວຜົມກູດຜູ້ນີ້. ປີກາຍນີ້, ເມື່ອກັບມາທີ່ ແອຊູໂອເຣີ, ຂ້າພະເຈົ້າບໍ່ສາມາດຈື່ ເອດີ ໄດ້ທັນທີ. ນາງໃຫຍ່ຂຶ້ນແລະເລີ່ມຫວີມວຍຜົມຫນາໆຂອງຕົນແບບພິເສດ. ແສງຕາຂອງນາງປະກົດມີແວວເລິກລັບໃດຫນຶ່ງໃຫມ່ໆອອກມາ, ສິ່ງນີ້ເອງທີ່ເຮັດໃຫ້ຂ້າພະເຈົ້າເກີດມີຄວາມວຸ້ນວາຍໃຈ. ມີເທື່ອຫນຶ່ງ, ຕອນໄປຢ່າງຫລິ້ນກັບ ເອດີ ຂ້າພະເຈົ້າໄດ້ຂໍໃຫ້ນາງອະນຸຍາດໃຫ້ຂ້າພະເຈົ້າຂຽນຈົດຫມາຍມາຫາ. ນາງກໍເຫັນດີ. ຂ້າພະເຈົ້າໄດ້ສົ່ງຈົດຫມາຍມາແຕ່ ດີຢັງ. ນາງຕອບໄປຢ່າງຫນ້າຮັກ, ຈົນເກືອບຂັ້ນວ່າຂ້າພະເຈົ້າໄດ້ທ່ອງຈົດຫມາຍສະບັບນັ້ນຂຶ້ນໃຈແລະຮັກສາມັນໄວ້ເປັນເວລາດົນນານ.

ຂະນະນີ້, ເອດີກາຍເປັນນາງສາວງາມທີ່ສຸດຄົນຫນຶ່ງແລ້ວ. ຮອຍຍິ້ມຂອງນາງໄດ້ພິຊິດໃຈຂ້າພະເຈົ້າ, ແລະມີຫລາຍເທື່ອຂ້າພະເຈົ້າກໍຊວດຮູ້ເມື່ອວ່າຕົນໄດ້ຢືນເກີ້ຢູ່ຕໍ່ ຫນ້ານາງສາວຄົງກົມກ່ອງບອບບາງນັ້ນໂດຍທີ່ບໍ່ຮູ້ວ່າຈະກ່າວສິ່ງໃດອອກມາ.

ນັ້ນແມ່ນເຫດຜົນທີ່ຈ່ອງດຶງຂ້າພະເຈົ້າໄວ້ກັບ ແອຊູໂອເຣີ. ແລະຫວ່າງຢ່ານີ້, ຂ້າພະເຈົ້າໄດ້ລັກຟັງລຸງກັບແມ່ເຖົ້າ ໂອລີວີອາລົມກັນຢູ່ເຮືອນຄົວ:

- ສະເພາະຂ້ອຍແລ້ວ. - ເພິ່ນເວົ້າຢ່າງຂຸ່ນວຂາດ, - ຂ້ອຍຈະບໍ່ກີດກັນບັກນ້ອຍຂອງພວກເຮົາເພື່ອບໍ່ໃຫ້ມັນອອກໄປຈາກ ແອຊູໂອເຣີ ນີ້ຈັກຫວ່າງຈັກໃດ. ມັນຈຳເປັນຈະຕ້ອງໄດ້ໄປຊອກຫາປະສົບການ, ດັ່ງທີ່ທ່ານ ທ້ອມບຣິດ ເຄີຍເວົ້າ. ຖ້າໃນມືຫາກບໍ່ມີ ໃບໄພ້ຕົວເກງແລ້ວ, ກໍຕ້ອງຫລິ້ນໃບລອງລົງມາ. ຈົ່ງໃຫ້ບັກ ເຊບຸຍແອນ ໄປທັດສະນາຈອນຮອບໂລກ. ບາງທີມັນອາດຈະຄົ້ນພົບບໍ່ຄຳແລະກໍບໍ່ແມ່ນວ່າຈະກັບຄືນມາດ້ວຍສອງຝ່າມືເປົ່າ. ແລ້ວບາດນັ້ນ, ແມ່ເຖົ້າ ໂອລີວີອາ ເອີຍ, ພວກເຮົາຈະໄດ້ເປັນເຈົ້າໂຄດລຸງຕາເຂົ້າຮ່ວມພິທີສົມລົດ...

---

* ໂກຣເກ ແມ່ນເກມຫລິ້ນຂອງຊາວອັງກິດຄ້າຍຄືກັບຕີຄີຂອງລາວ.

- ທ່ານ ບຣັງ, ທ່ານ ເວົ້າຫຍັງຈັ່ງຊັ້ນ? - ແມ່ເກົ້າໂອລີວີອາ ຂັດຂຶ້ນຂຶ້ນມາ.

- ກະເວົ້າຈັ່ງຊັ້ນແລ້ວ, - ລຸງຂ້າພະເຈົ້າຕອບ, ແລ້ວຂ້າພະເຈົ້າຍັງໄດ້ຍິນເພິ່ນເຂາະກອກເບຣຍີນເຂົ້າໃສ່ຂອບເຕົາໄຟທີ່ເຮັດດ້ວຍດິນຈີ່ນັ້ນບັກແຮງໆ. - ສາວ ເອດີພີນກູດນັ້ນ ມັນບໍ່ແມ່ນຕົກເປັນເມຍທີ່ບໍ່ທັນແຕ່ງຂອງບັກນ້ອຍພວກເຮົາຢ່າງຂາດຕົວໄປແລ້ວຫວະ? ອີກສາມປີ ສາວນ້ອຍນັ້ນຈະມີອາຍຸຄົບຮອບ ໑໘ ປີເຕັມ. ຕອນນັ້ນ ບັກນ້ອຍກໍຈະຫາເງິນໄດ້ ແລ້ວພວກເຂົາຄວນຈະຄຶດເຖິງການກໍ່ສ້າງເຮືອນຮັງທີ່ອົບອຸ່ນຂຶ້ນມາໄດ້ແລ້ວ. ໂອ, ເກົ້າ ໂອລີວີອາເອີຍ, ອີກບໍ່ດົນດອກ ພວກເຮົາກໍຈະໄດ້ອຸ້ມຫລານແລ້ວເດ...

ລຸງຂອງຂ້າພະເຈົ້າຫົວຮ່າງອອກມາຢ່າງເປັນສຸກໃຈ.

ຂ້າພະເຈົ້າບໍ່ສາມາດໄດ້ຍິນເລື່ອງລົມກັນນີ້ຕໍ່ໄປອີກ, ແຕ່ຄຳເວົ້າຕ່າງໆຂອງລຸງຂ້າພະເຈົ້າໄດ້ຊຶມເລິກເຂົ້າໃນຫົວໃຈຂອງຂ້າພະເຈົ້າ, ພາໃຫ້ຂ້າພະເຈົ້າມີຄວາມອີ່ມເອີບໃຈຂຶ້ນບໍ່ຈັກວ່າເທົ່າໃດ!

ປະຈຸບັນນີ້, ເມື່ອຫວນຄືນເຖິງຄວາມເວົ້າຄວາມຈາຕ່າງໆເຫລົ່ານັ້ນ, ແລ້ວມັນພາໃຫ້ຂ້າພະເຈົ້າ ຮູ້ສຶກເບົາອົກເບົາໃຈແລະສວ່າງອາລົມຂຶ້ນມາ.

ແມ່ເກົ້າ ໂອລີວີອາ ກ້າວເຂົ້າມາ.

- ເຊມຸຍແອນ, ຫລານມີຈົດຫມາຍ, ນີ້ເດ.

ຂ້າພະເຈົ້າຈັດການໄຂຊອງຈົດຫມາຍ. ແລ້ວກໍຍ່າງມາຢືນຢູ່ຂ້າງປະຕູປ່ອງຢ້ຽມ, ເພື່ອອາໃສແສງສະຫວ່າງເຄິ່ງມືດເຄິ່ງຮຸ່ງໃນຍາມສາຍັນນັ້ນ ອ່ານຫນັງສືແກວຕ່າງໆທີ່ເຕັມໄປດ້ວຍຂໍ້ຄວາມແຂງກະດ້າງຂອງເພື່ອນ ໂຣເບີດ, ແລ້ວຂ້າພະເຈົ້າກໍໄດ້ເຮັດໃບເຈ້ຍຫນາງແຂບສີຄຳນັ້ນຕົກລົງສູ່ພື້ນເຮືອນຢ່າງບໍ່ໄດ້ຕັ້ງໃຈ. ໂຣເບີດຂຽນວ່າ:

"ທ່ານ ບີນ ທີ່ ເຄົາລົບ! ເມື່ອຊາບແຈ້ງທຸກຢ່າງກ່ຽວກັບຜູ້ອຸປະກາລະຂອງທ່ານ. ຂ້າພະເຈົ້າເຫັນວ່າ ທ່ານຄວນຈະເຂົ້າໃຈເອົາເອງວ່າຄວນເບິ່ງຄືນຄວາມສຳພັນທາງດ້ານສ່ວນຕົວຂອງພວກເຮົາ. ເພື່ອນຝູງຂອງຂ້າພະເຈົ້າກໍຖືວ່າ ແຕ່ນີ້ຕໍ່ໄປທ່ານບໍ່ຄວນຈະມາພົບພໍ້ກັບພວກຂ້າພະເຈົ້າຢູ່ໃນບໍລິເວນຝາສີດ້ານຂອງວິທະຍາໄລອີກ. ຂໍໃຫ້ເຂົ້າໃຈວ່າ ການເດີນທາງທີ່ພວກ

ເຮົາໄດ້ຄາດຫມາຍເອົາໄວ້ນັ້ນມັນເປັນໄປບໍ່ໄດ້ຢ່າງແນ່ນອນ. ຂ້າພະເຈົ້າຂໍກືເປັນກງດ ແລະ ງຽງ... ຣ. ສະມິນ."

ພຸດໂທເອີຍ, ຈົ່ງແມ່ນສຸພາບ!

ໃບຫນ້າຂອງຂ້າພະເຈົ້າຮ້ອນວູ່ຂຶ້ນຄືດັ່ງກືກດີບ. ພວກເຂົາບໍ່ຢາກພົວພັນຫຍັງກັບຂ້າພະເຈົ້າເລີຍຫວະ? ການມີຫນ້າຂອງຂ້າພະເຈົ້າຈະເຮັດໃຫ້ພວກເຂົາມີຄວາມອັບອາຍຊັ້ນຫວະ? ກໍດີຍິ່ງເປັນການດີ. ອ້າ, ການທີ່ລຸງຂອງຂ້າພະເຈົ້າເກີດມີຄວາມໂມໂຫຂຶ້ນນັ້ນແມ່ນກືກຕ້ອງແລ້ວ!

## V

ເອດີ ນັ່ງຮຽງຂ້າພະເຈົ້າຢູ່ໃນສວນນ້ອຍແຄມກະຫນິນ ຄືງ ທີ່ເບິ່ງລົງຫາທ່າກຳປັ່ນ. ຕໍ່ຫນ້າຕັ່ງມ້າທີ່ພວກຂ້າພະເຈົ້ານັ່ງຢູ່ ມີຫນານດອກໄມ້ນ້ອຍຫນານຫນຶ່ງ, ຊື່ງມວນດອກໄມ້ເຫລົ່ານັ້ນ ພວມຫຸບຫ່ງວລົງທ່າມກາງພືດພັນອື່ນໆທີ່ພວມຂຽວສົດຊື່ນຢູ່. ເມື່ອຫລຽວລົງໄປທາງລຸ່ມ ກໍຈະສາມາດແນມເຫັນເມກຫມອກກຸ່ມຫນຶ່ງປະກົດຕົວຂຶ້ນມາຢູ່ເຫນືອມະຫາສະຫມຸດ. ທ່າມກາງຫລັງຄາເຮືອນທີ່ມຸງດ້ວຍດິນຂໍຂອງຕົວເມືອງ, ມີຕຶກອັນໃຫຍ່ໂຕມະໂຫລານຫລັງຫນຶ່ງພຸ່ງພົ້ນຂຶ້ນມາ, ນັ້ນຄືສາຂາທະນາຄານປະຈຳ ແອຊູໂອເຣີ ທີ່ມີຊື່ວ່າ "ເມີຍລິດລຸຍຍິງ". ຊາວ ແອຊູໂອເຣີ ບໍ່ຈັກວ່າເທົ່າໃດຄົນຝັນໄຝ່ທີ່ຈະໄດ້ທຳງານຢູ່ໃນທະນາຄານດັ່ງກ່າວ.

ເອດີ, ນ້ອງຮູ້ບໍ່ວ່າອ້າຍຈະຈາກແອຊູໂອເຣີ ນີ້ໄປແລ້ວໃດ - ຂ້າພະເຈົ້າເວົ້າ.

ເປັນເທື່ອທຳອິດທີ່ຂ້າພະເຈົ້າເອີ້ນເພື່ອນສາວຂອງຕົນວ່າ "ນ້ອງ" ແລະລໍຖ້າຟັງວ່ານາງຈະຕອບມາແບບໃດ.

- ເຮັດແບບນັ້ນມັນກືກຕ້ອງແລ້ວອ້າຍເຊມຸຍແອນ ເອີຍ, - ນາງຕອບແລະງວາກມາ. ຮີມສົບທັງຄູ່ຂອງນາງສັ່ນຄ່ອຍ, ແຕ່ນ້ຳສຽງຂອງນາງຍັງເປັນປົກກະຕິດີຢູ່. - ອ້າຍຈະໄດ້ເຫັນກັບຕາຕົນເອງວ່າຄົນແຫ່ງຕ່າງໆເຂົາດຳເນີນຊີວິດກັນຢ່າງໃດ. ພໍ່ເຄີຍເວົ້າວ່າການໄປທັດສະນາຈອນໃນແຫ່ງຕ່າງໆນັ້ນມັນເປັນສິ່ງທີ່ຫນ້າສົນໃຈກ່ວາສິ່ງໃດຫມົດ. ກ້າຫາກສຸຂະພາບເຂັ້ມແຂງດີ, ພໍ່ກໍຄົງໄປ ອິດສະຕາລີແລ້ວ... ອ້າຍ ເຊມຸຍແອນ, ອ້າຍຈົ່ງເລືອກເອົາເສັ້ນທາງເດີນທີ່ດີທີ່ສຸດໃຫ້ແກ່ຕົວຂອງອ້າຍ, - ເອດີເວົ້າຕໍ່.

- ແລະໃຫ້ນ້ອງນຳອີກ, ເອດີເອີຍ, - ຂ້າພະເຈົ້າເວົ້າເສີມຂຶ້ນຄ່ອຍໆ.

ນາງແນມຈົ້ງເບິ່ງດວງຕາຂອງຂ້າພະເຈົ້າ.

- ນ້ອງເຂົ້າໃຈ, ແຕ່ປະຈຸບັນນີ້ທາງທີ່ດີທີ່ສຸດແມ່ນບໍ່ຄວນເວົ້າເຖິງເລື່ອງນັ້ນ. ອ້າຍ ເຊມຸຍ ແອນ, ອ້າຍເປັນຄົນດີຫລາຍ! ນ້ອງພວມອຸກ, ອຸກຫລາຍໃດອ້າຍ, ແລະກ້າຂາດອ້າຍໄປ ນ້ອງກໍຍິ່ງຈະອຸກກ່ວານີ້. ນ້ອງຂໍຮ້ອງໃຫ້ອ້າຍຈົ່ງເຮັດຕາມທີ່ອ້າຍຕ້ອງການແລະຢ່າໄດ້ວິຕົກກັງວົນ, ເປັນຫ່ວງເຖິງນ້ອງເລີຍເດີອ້າຍ! ລຸງ ແຮັດຢີ ເວົ້າວ່າຈະຕ້ອງຢືນຢູ່ດ້ວຍລຳແຂ່ງຂອງໂຕເອງ. ສ່ວນອ້າຍນັ້ນເຂັ້ມແຂງດີ, ອ້າຍຈະຕ້ອງໄດ້ຮັບໄຊຊະນະ... ແມ່ນແລ້ວ, ອ້າຍ ເຊມຸຍແອນເອີຍ, ອ້າຍຈົ່ງເຊື່ອນ້ອງ. ນ້ອງເຂົ້າໃຈອ້າຍໄດ້ດີກ່ວາຕົວຂອງອ້າຍເອງ!

ເອດີຍິ້ມຢ່າງອ່ອນຫວານ.

- ອ້າຍຢາກຈະຮູ້ວ່ານ້ອງພວມຄຶດຫຍັງແດ່ບໍ່ລະ?

- ແນ່ນອນວ່າອ້າຍຢາກຈະຮູ້ທີ່ສຸດເລີຍ.

ນາງເວົ້າຢ່າງເຄັ່ງຂຶມ:

- ນ້ອງຄຶດວ່າຄວາມເປັນເພື່ອນຊຸດຊ່ວຍຊີວິດມະນຸດ. ມື້ວານນີ້ນ້ອງອ່ານພົບບັນຫານັ້ນຢູ່ໃນປຶ້ມເຫລັ້ມຫນຶ່ງ, ແລະບັນຫານີ້ມັນກໍຖືກຕ້ອງທີ່ສຸດ...

ຫລັງຈາກນັ້ນ ພວກຂ້າພະເຈົ້າໄດ້ເດີນເລາະໄປຕາມກະຫາບີນ ຄົງມຸ່ງຫນ້າໄປທາງທິດຝາຍກັ້ນນ້ຳແລະຢືນທອດສາຍຕາເບິ່ງອ່າວຢູ່ຕັ້ງດົນ. ຝູງເຮືອໃບລຳງາມໆພວມກວ້າຍເຈີດໄປທາງແຫລມເຢນແລະຢູ່ແຫ່ງນັ້ນເອງ, ໂດຍຈັບທິດລົມໄດ້ຢ່າງຖືກຕ້ອງ, ພວກມັນແລ່ນຫັນຄືນຢ່າງຄ່ອງແຄ້ວ. ເຮືອເຫລັ້ມຫນຶ່ງພຸ່ງພົ້ນເຫລັ້ມອື່ນໆຂຶ້ນມາ. ບັນດາໃບລົມຂອງມັນເຫລື້ອມຍິບຍັບຢູ່ພາຍໃຕ້ແສງອາທິດທີ່ພວມຈະອັດສະດົງ.

- ລາວບັນຊາໃບລົມໄດ້ຄ່ອງແຄ້ວອີຫລີເນາະ, - ເອດີກ່າວຊົມທັງກາງງ່າກົວຊີ້ສັນຍານໄປທາງເຮືອໃບເຊິ່ງຢູ່ເທິງນັ້ນມີຄົນຕຸ້ຍພີຜູ້ຫນຶ່ງ, ຜິວດຳເຫລື້ອມນັ່ງຢູ່ເບື້ອງຂບຂີ່.

- ບົບໃດຫັ້ນ, - ຂ້າພະເຈົ້າຕອບ.

- ແມ່ນແລ້ວ, ບົບແບັກໂວເຮີ, - ເອດີ ຢືນຢັນ. - ເຂົາເຈົ້າລືກັນວ່າ ລາວມໍ່ຈະໄດ້ສືບທອດມໍລະດົກງວດຫນຶ່ງ.

ຂ້າພະເຈົ້າບໍ່ພໍໃຈເມື່ອເຫັນວ່າ ເອດີສົນໃຈກັບ ບິບ, ຜູ້ເຊິ່ງເປັນຫລານຂອງທ່ານ ເຊີຍເຕີນ. ແຕ່ເຣືອໃບຂອງລາວຈັ່ງແມ່ນວິເສດອີ່ຫລີ.

- ພວກເຮົາກັບເມືອເຮືອນເທາະ? - ຂ້າພະເຈົ້າສະເຫນີກັບ ເອດີ.

- ຈ້າວ. ຢູ່ນີ້ ອາກາດອ່າວເຢັນແດ່ແລ້ວ, - ນາງເຫັນດີກັບຂ້າພະເຈົ້າຢ່າງຄໍາຮູ້, ເຖິງແມ່ນວ່າຢູ່ເທິງຝັ່ງບໍ່ໄດ້ເຢັນຈັກຫນ້ອຍເລີຍ.

ເມື່ອຂ້າພະເຈົ້າມາເຖິງເຮືອນ, ພໍ່ຂອງຂ້າພະເຈົ້າກິນເຂົ້າແລງຮຽບຮ້ອຍແລ້ວ. ຕໍ່ຄໍາຖາມອັນຫງອຍເຫງົາຂອງເພິ່ນນັ້ນ ຂ້າພະເຈົ້າໄດ້ແຕ່ກົ້ມຫົວລົງເທົ່ານັ້ນ.

- ບໍ່ມີຂ່າວດີຫຍັງເລີຍ.

- ຖ້າຫິວກໍໄປກິນເຂົ້າສາ ລູກເອີຍ, - ພໍ່ຂ້າພະເຈົ້າເວົ້າ.

ຫລັງຈາກກິນເຂົ້າແລ້ວ, ເພິ່ນກໍເອີ້ນຂ້າພະເຈົ້າໄປຫ້ອງເຮັດວຽກ, ບ່ອນເຊິ່ງວັດຖຸທຸກຢ່າງລ້ວນແຕ່ເປັນທີ່ຄຸ້ນເຄີຍມາແຕ່ເຍົາໄວສໍາລັບຂ້າພະເຈົ້າ, ນັບແຕ່ເຄື່ອງຫນີບເຕົາໄຟຝີງແບບດີນກ້ວາງມີເລັບແຫລມໆຈົນກະທັ້ງເຄື່ອງຂຸຂີ້ກອກຢາໂຕບັກໃຫຍ່ໆທີ່ເຮັດດ້ວຍອອງເຕົ່າຈາກກີເນ. ຂ້າພະເຈົ້າແນມເຫັນເສັ້ນຜົມຫງອກຂາວພູນຢູ່ສອງຟາກຂະຫມັບແລະການແນມເບິ່ງຢ່າງກະຫນອມຮັກແພງຈາກຄູ່ຕາທີ່ອິດອ່ອນເຊິ່ງຕົກສີໄປແລ້ວນັ້ນຂອງພໍ່. ໂອຍ, ຈັ່ງແມ່ນນິ້ມນວນແລະຄ່ຽມຄົມແທ້ເດ! ເພິ່ນຖອນເຊັກເງິນສອງໃບອອກມາຈາກລີ້ນຊັກໂຕະເກົ່າໆແລະເວົ້າດ້ວຍນ້ຳສຽງຄ່ອຍໆເຊິ່ງແຝງດ້ວຍຄວາມໂສກເສົ້າ:

-ລູກຮັກຂອງພໍ່! ລູກໄດ້ສຶກສາຮ່ຳຮຽນດັ່ງທີ່ມື້ລາງແມ່ຂອງລູກຝັນໄຝ່... - ເມື່ອເອີ່ຍສໍານວນເຫລົ່ານີ້ອອກມາ, ພໍ່ຂອງຂ້າພະເຈົ້າເງີຍຫນ້າຂຶ້ນແນມເບິ່ງຮູບຖ່າຍໃບໃຫຍ່ຂອງແມ່ຂ້າພະເຈົ້າ ທີ່ແຂວນໄວ້ກັບຝາແລະຈັບແພມົນອອກມາເຊັດດວງຕາທັງຄູ່ທີ່ປຽກຈື້ນໄປດ້ວຍນ້ຳຕາ.

ຂ້າພະເຈົ້າກະຕືນຕັນໃຈເຖິງຂັ້ນຍືນຈັງງັງໄປຫມົດ. ໃນວິນາທີນັ້ນ, ຮູບພາບທີ່ຄ່ຽມຄົມນິ້ມນວນຂອງແມ່ຂ້າພະເຈົ້າ ປະກົດວ່າພົ້ນຊີບຄືນມາຢູ່ໃນຈິດສໍານຶກຂອງຂ້າພະເຈົ້າ. ແມ່ເພິ່ນຮັກແພງຂ້າພະເຈົ້າຫລາຍທີ່ສຸດ!

- ລູກຂອງພໍ່, ເວົ້າອອກມາແລ້ວມັນເຈັບໃຈ, ແຕ່ພໍ່ກໍຈະເວົ້າ, - ເພິ່ນເວົ້າຕໍ່, ແນມ

ເບິ່ງຂ້າພະເຈົ້າດ້ວຍຄູ່ຕາທີ່ນອນຢູ່ໃຕ້ວົງຂົນຄິ້ວທີ່ຫງອກຂາວ. ທ່າທີຂອງພໍ່ຂ້າພະເຈົ້າເຕັມໄປດ້ວຍວາດທີ່ມີຄວາມໝາຍ ແລະເພິ່ນກ່າວສຳນວນທີ່ເປັນທີ່ນິຍົມກັນແຕ່ສະໄໝເກົ່າກ່ອນອອກມາວ່າ. -ພວກເຮົາບໍ່ໄດ້ຮັບຂ່າວຄາວຫຍັງຈາກ ທ່ານ ລໍເດີເກົ່າ ທັງນັ້ນ, ແລະອາດເປັນໄປໄດ້ວ່າ ທ່ານ ລໍເດີບໍ່ມີຊີວິດຢູ່ອີກແລ້ວ. ແຕ່ພໍ່ກໍບໍ່ກ້າກ່າວປະນາມຊາຕາກຳ, ຍ້ອນພໍ່ເຂົ້າໃຈແຈ້ງເຖິງກົດເກນວິຄິດນັ້ນແມ່ນສອດສ່ອງທີ່ສຸດ. ຖ້າຫາກລູກບໍ່ສາມາດສຶກສາຮໍ່າຮຽນຈົນສຸດກົກສຸດປາຍແລ້ວ, ກໍຢ່າສາ, ປ່ອຍໃຫ້ມັນເປັນໄປຕາມບຸນຕາມກຳ. ແຕ່ທຸກໆຄົນ-ພໍ່, ລຸງ ແຮັດຍີ ແລະນັບທັງແມ່ເກົ້າ ໂອລີວີອາ ຜູ້ກະຕັນຍູຂອງພວກເຮົາ-ລ້ວນແຕ່ປາກະໜາຢາກໃຫ້ລູກສະແຫວງຫາໂຊກຊາຕາຂອງຕົນເອງ. ມື້ນີ້ພໍ່ໄດ້ໂອ້ລົມກັບເຄີບກັບອາຈານຂອງພວກເຮົາຄືຄຸນພໍ່ ອີແອເຣມີອາ. ມະນຸດຜູ້ຮັບໃຊ້ໂບດທີ່ໜ້ານັບຖືນັ້ນເຫັນດີຢ່າງສົມບູນກັບບັນຫາເຊິ່ງເມື່ອກ່ອນນີ້ລຸງແຮັດຍີໄດ້ຊຸກຍູ້ ...

-ລູກເຂົ້າໃຈດີ - ຂ້າພະເຈົ້າເວົ້າແລະກົ້ມຫົວ.

-ລູກເຂົ້າໃຈແຈ້ງເຖິງສະພາບແວດລ້ອມຂອງຄອບຄົວເຮົາ, ແບບນັ້ນມັນດີແລ້ວ, -ພໍ່ຂ້າພະເຈົ້າຫັນໃຈໃຫຍ່. -ຕ້ອງຕັດສິນຊາຕາກຳຂອງຕົນເອົາເອງ. ລູກຂອງ ພໍ່ ມີລຳແຂນອັນແຂງແກ່ນແລະມັນສະໝອງອັນສອດສ່ອງ, ຮັບຮູ້ຫລາຍບັນຫາຢ່າງເລິກເຊິ່ງ, ສ່ວນຈິດໃຈຂອງມັນແມ່ນມີຄວາມກະຕັນຍູຄືກັນກັບນ້ຳລາງແມ່ຂອງມັນ ...

ພວກເຮົາທັງສອງລ້ວນແຕ່ແນມຂຶ້ນເບິ່ງຮູບກ່າຍຂອງແມ່ດ້ວຍຄວາມໂສກເສົ້າ ແລະກະຕັນຍູ.

-ເຊມຸຍແອນ ເອີຍ, ລູກຫວັງຢາກຈະຊອກເຮັດວຽກງານທຳ, -ພໍ່ຂ້າພະເຈົ້າເວົ້າຕໍ່. -ພໍ່ແລະລຸງ ແຮັດຍີ ເຫັນແຈ້ງແລ້ວວ່າລູກໄດ້ພະຍາຍາມຊອກຫາວຽກງານຢູ່ນີ້ຄືແນວໃດແລ້ວ, ແລະຄອບຄົວໄດ້ຕັດສິນໃຈ ... -ເວົ້າຮອດນີ້, ເພິ່ນມອບເຊັກເງິນສອງໃບໃຫ້ຂ້າພະເຈົ້າ. -ຈົ່ງຖືເອົາ, ເງິນຈຳນວນນີ້ແມ່ນຊັບສົມບັດທັງໝົດທີ່ພໍ່ມີຢູ່, ເປັນກ້ອນເງິນນ້ອຍໆຂອງພໍ່ທີ່ເກັບທ້ອນໄວ້ໄດ້. ລູກຈົ່ງພະຍາຍາມໃຊ້ຈ່າຍແບບໃດ ເພື່ອພາຍລຸນມາອາດຈະຫວນຄຶດເຖິງພໍ່ແມ່ຂອງລູກດ້ວຍຄວາມຮູ້ບຸນຄຸນ. ລູກຄວນຈົດຈຳໄວ້ວ່າພໍ່ແມ່ຍາມໃດກໍຮັກແພງລູກເຕົ້າ, ຕ້ອງຮູ້ວ່າແຕ່ລະມື້ພໍ່ໄດ້ນັ່ງມົ້ວສຸມຢູ່ກັບເຈ້ຍກັບສໍຂອງທ່ານ ລໍເດີ ປາກລົນເຕີນ

ຕິມຕັ້ງສີ່ຈິວໂມງຢູ່ໃນຫ້ອງການ, ສ່ວນແມ່ຜູ້ກະລຸນນາຂອງລູກນັ້ນໄດ້ເປັນຜູ້ເກັບໂຮມໄວ້ແຕ່ລະອັດແຕ່ລະບີ້. ພໍ່ແມ່ໄດ້ອອກແຮງງານເພື່ອເກັບທ້ອນເອົາໄວ້ໃຫ້ລູກເຖິງແມ່ນວ່າມັນເປັນເງິນຈຳນວນນ້ອຍກໍຕາມ. - ຫົວຂອງພໍ່ຂ້າພະເຈົ້າສັ່ນສະເທືອນຂຶ້ນຍ້ອນຄວາມຕື້ນຕັນໃຈ, ເພິ່ນເດ່ມືທັງສອງມາຍັງຂ້າພະເຈົ້າ:

- ລູກຮັກຂອງພໍ່! ...

ຂ້າພະເຈົ້າບໍ່ສາມາດພໍທີ່ຈະເວົ້າອອກມາເປັນສຽງໄດ້, ນອກຈາກຫມູບຫົວເຂົ້າໃສ່ຊວງເອິກຂອງພໍ່, ຈູບມືທີ່ຫ່ຽວແຫ້ງແລະເຕັມໄປດ້ວຍປານດຳນັ້ນຢູ່ຕັ້ງດົນແລະຫົດໃຫ້ມັນປຽກຊຸ່ມດ້ວຍຢາດນ້ຳຕາແຫ່ງຄວາມກະຕັນຍູກະຕະເວທີ.

- ຢ່າ, ຢ່າ, ລູກເອີຍ...

ເພິ່ນຕົບບ່າຂ້າພະເຈົ້າບາດຄ່ອຍໆ.

- ມັງນເງິນໄວ້ສາ... ໂລກນີ້ກ້ວາງໃຫຍ່ມະຫາສານ, ດວງອາທິດບໍ່ເຄີຍຕົກພາຍໃນພະລາຊະອານາຈັກ, ແລະອົງເຈົ້າສະຫມຸດ ແນັບຕູນ ຈະເຊີດຊູ ພືນທຸງຂອງພວກເຮົາໃຫ້ປິວສະບັດຢູ່ເທິງມະຫາສະຫມຸດ. ຈົ່ງພະຍາຍາມສ້າງຕົວ! ຈົ່ງເຊື່ອວ່າ ເວລາກັບມາລູກຈະໄດ້ພົບກັບຄົນຜູ້ທີ່ຮັກແພງລູກຄືເມື່ອກ່ອນຢູ່ໃນ ແອຊູໂອເອີ ນີ້.

ພໍ່ຂອງຂ້າພະເຈົ້າເຮັດຕາສີຫີບໆເຂົ້າ, ແນມອອກໄປຈາກປ່ອງຢ້ຽມເຊິ່ງຜ່ານບ່ອນນັ້ນຈະສາມາດແນມເຫັນເຮືອນຫລັງນ້ອຍຂອງຄອບຄົວ ວິນເທ ໄດ້, ຂ້າພະເຈົ້າເຂົ້າໃຈວ່າພໍ່ຂ້າພະເຈົ້າໄດ້ລ່ວງຮູ້ເຖິງຄວາມລັບຂອງຂ້າພະເຈົ້າແລ້ວ.

ພໍ່ຂ້າພະເຈົ້ານັ່ງຢູ່ເທິງຕັ່ງອີ້ຢູ່ຂ້າງເຕົາໄຟທີ່ເພິ່ນຮັກແພງແລະພໍໃຈນັ້ນ ແລະໂອ້ລົມກັບຂ້າພະເຈົ້າຈົນເດິກດື່ນທ່ຽງຄືນ. ຄາວຍັງຫນຸ່ມແຫນ້ນເພິ່ນເຄີຍໄດ້ໄປທັດສະນາຈອນມາແລ້ວ, ແລະຂ້າພະເຈົ້າກໍໄດ້ຟັງເລື່ອງລ່າຍິງເຕົ່າຢູ່ ກີເນໃຫມ່ນັ້ນອີກຄັ້ງຫນຶ່ງ.

ໂອຍ, ພໍ່ທີ່ຮັກແພງຜູ້ໂຊກຮ້າຍຂອງລູກ! ຈົນເຖິງປະຈຸບັນນີ້ ຂ້າພະເຈົ້າຍັງຈົດຈຳການແນມເບິ່ງຢ່າງກະຫນຸກະຫນອມຂອງເພິ່ນ ໃນເວລາເພິ່ນກ້າວຂຶ້ນຂັ້ນໄດແຄບໆເປັນວົງກົ້ນຫອຍເພື່ອໄປຍັງຫ້ອງນອນຂອງຕົນ. ເພິ່ນຢຸດຢູ່ເທິງຂັ້ນໄດພ້ອມດ້ວຍທຽນໄຂທີ່ກືຢູ່ໃນມືຄາວຫນຶ່ງ. ອາຍຊຸ່ມພົ່ນຂຶ້ນມາແຕ່ເຮືອນຄົວ. ທຽນໄຂຍ້ອຍອອກແລະຢົດໄຂຂອງມັນຕົກ

ລົງສູ່ຕີນໂຮງທຽນທີ່ເຮັດດ້ວຍທອງຫນັກຕຶກຊຶກ ເຊິ່ງພວມສັ່ນສະເທືອນຢູ່ເທິງມືຂອງພໍ່: ພໍ່ກົ້ມລົງ, ແລ້ວງຶກຫົວເວົ້ານຳຂ້າພະເຈົ້າ.

- ຢ່າຫລົງນອນຫລັບຈົນລືມຕື່ນເດີລູກ! ອີ່ຕາເຖົ້າອິກພີ ຈະໄປຊື້ນ້ຳມັນໄມ້ແປກໃນຕອນຫົກໂມງແລະເຫັນດີໃຫ້ລູກອາໃສໄປນຳລົດເພິ່ນ. ລູກຈະໄປເຖິງ ເວສະລີ ທັນກັບກົງວລົດໄຟທີ່ຈະອອກຕອນເຈັດໂມງສິບເຈັດນາທີ. ອວຍພອນໃຫ້ລູກຈົ່ງນອນຫລັບຝັນດີ.

ຂ້າພະເຈົ້ານອນບໍ່ຫລັບເລີຍ. ວຽກງານທຸກຢ່າງຖືກຕັດສິນໄປແລ້ວ. ຕອນເຊົ້າມື້ອື່ນ ຂ້າພະເຈົ້າຈະອອກຈາກ ແອຊູໂອເອີ ຢ່າງມິດໆເພື່ອບໍ່ໃຫ້ໃຜຮູ້ຈັກນຳ. ຫລັງຈາກນັ້ນ ຂ້າພະເຈົ້າຈຶ່ງຈະສົ່ງຈົດຫມາຍມາໃຫ້ ເອດີ.

ຂ້າພະເຈົ້າຮູ້ສຶກວ່າຢູ່ເບື້ອງນອກປະຕູປ່ອງຢ້ຽມພວມມີລົມພາຍຸອຸບັດຂຶ້ນ. ແຕ່ນັ້ນມັນເປັນພຽງແຕ່ການກັບມາຂອງລຸງ ແຮັດຍີ ເທົ່ານັ້ນ. ເພິ່ນພວມຖົກຖຽງບັນຫາໃດບັນຫາຫນຶ່ງກັບແມ່ເຖົ້າໂອລີວີອາ, ແຕ່ທັນໃດນັ້ນ ເພິ່ນກໍງຽບໄປເລີຍ. ແມ່ເຖົ້າ ໂອລີວີອາ ມີຈຸດພິເສດຢູ່ບ່ອນວ່າລາວຈະຂັດຂວາງທຸກໆຄົນບໍ່ວ່າຈະເປັນໃຜກໍຕາມຫາກແຊກຊຶມເຂົ້າໃນຄວາມງຽບສະຫງົບ ໃນອານາຈັກເຮືອນຄົວຂອງລາວ. ຫລັງຈາກນັ້ນຄາວຫນຶ່ງ, ຂ້າພະເຈົ້າກໍໄດ້ຍິນສຽງບາດຕີນຄ່ອຍໆຂອງລຸງແຮັດຍີ ແລະສຽງງັບປະຕູຢ່າງລະມັດລະວັງທີ່ຫ້ອງຂອງເພິ່ນ.

* * *

ເຊົ້າມື້ນັ້ນ, ບັນຍາກາດແຫ່ງລະດູບານໃຫມ່ພຸ່ງພົ້ນຂຶ້ນມາຢ່າງພະວົງຫລົງໄຫລ.

ຫລັງຄາດິນຂໍຂອງບັນດາເຮືອນຕ່າງໆທີ່ ແອຊູໂອເອີ ຖືກລ້າງດ້ວຍນ້ຳຫມອກຍາມເຊົ້າ, ສ່ອງແສງສະທ້ອນນາໆສີທີ່ສົດໃສງົດງາມພາຍໃຕ້ແສງແດດ. ມະຫາສະຫມຸດ ອັດລັງຕິກອັນກວ້າງໄກໄພສານນັ້ນ ຍັງຄົງຫລັບຝັນຈົມດິ່ງຢູ່ພາຍໃຕ້ປຸຍນ້ຳຫມອກສີອິດໃນເບື້ອງລຸ່ມແຫ່ງມ່ານເມກສີກຸຫລາບແດງຮຸ່ງທີ່ກວ້າງໄກ. ຫົນທາງຄ່ອຍໆອ້ຽວໆຕົວໄປຕາມຫນ່ວຍພູ. ທ່ານ ອິກພີ ນັ່ງຢູ່ເທິງລົດມ້າທີ່ກ່າຍກອງໄປດ້ວຍກວດແກ້ວໃສ່ຢາໃຫຍ່ທີ່ຮອງດ້ວຍເຟືອງນັ້ນ, ທັງບັງຄັບລົດໄປຊ້າໆແລະບໍ່ຟ້າວບໍ່ຟັ່ງຫຍັງເລີຍ. ມ້າຕົວຈ່ອຍໆນັ້ນໂຍກກະດູກຂຶ້ນໂຮມແຮງເດີນຜ່ານເສັ້ນທາງຊັນທີ່ເນັ່ງໄປສູ່ເສັ້ນທາງໃຫຍ່ຢູ່ເບື້ອງເທິງ. ແອຊູໂອເອີ ຄ່ອຍໆ

ກອຍອອກໄປຢູ່ເບື້ອງລຸ່ມ. ສີສັນອັນຂຽວສົດຊື່ນຂອງຊຸມພືກສາຊາດຢູ່ສອງຂອກທາງຊວນໃຫ້ຂ້າພະເຈົ້າມີຄວາມຊື່ນຕາຂຶ້ນມາ, ຂ້າພະເຈົ້າກ່າວອຳລາຢ່າງມິດງຽບຕໍ່ທຸກສິ່ງທີ່ມີຄ່າສຳລັບຂ້າພະເຈົ້າໃນແຫ່ງນີ້ໄປຈົນຮອດທາງລ້ຽວທີ່ຂົວ.

ທັນໃດນັ້ນ ຂ້າພະເຈົ້າກໍແນມເຫັນ ເອດີ, ນາງຢືນຢູ່ແຄມຝັ່ງຫ້ວຍແລະໂບກມືໃສ່ຂ້າພະເຈົ້າ. ທ່ານ ອີກພີຫ້າມມ້າດ້ວຍຄວາມຄ່ຽມຄົມ, ນາງແລ່ນມາຫາລົດທີ່ຈອດຢູ່, ແລ້ວຂ້າພະເຈົ້າໂດດລົງຈາກລົດ.

-ໂອ, ເອດີ!

ພວກເຮົາຍ່າງໄປເບື້ອງຫນ້າເລາະຕາມເສັ້ນທາງຫລວງ. ເອດີມອບດອກໄມ້ປ່າສີອິດຊໍ່ນ້ອຍຫນຶ່ງໃຫ້ຂ້າພະເຈົ້າ.

-ອ້າຍ ເຊມຸຍແອນ, ຂໍອ້າຍຈົ່ງເດີນທາງດ້ວຍຄວາມສະຫວັດດີພາບ!

ດວງຕາທັງຄູ່ຂອງ ເອດີ ເຫມືອນກັບດວງດອກໄມ້ສີອິດຂຳທີ່ປຽກຊຸ່ມເຫລົ່ານັ້ນ.

ຂ້າພະເຈົ້າຊັບຊົ່ມດ້ວຍຄວາມກະຕຸ້ນໃຈ:

-ເອດີ, ດີແລ້ວທີ່ນ້ອງມານີ້!

-ນ້ອງຢາກຈະຈັບມືອຳລາອ້າຍ. ທີ່ນັ້ນດອກ, -ນາງເວົ້າ.

-ລາເດີ ເອດີ, ນ້ອງຢ່າລືມອ້າຍເດີ?

-ລາກ່ອນອ້າຍ, ແລ້ວຈົ່ງກັບມາເດີອ້າຍ!... ນ້ອງຈະກ້າ...

ສຽງຝີຕີນມ້າແລ່ນກີບໆຢູ່ເທິງຂົວໄມ້. ລົດລ້ຽວເຂົ້າເບື້ອງຫລັງພູແລ້ວຂ້າພະເຈົ້າຈຶ່ງບໍ່ສາມາດແນມເຫັນ ເອດ ອີກ.

ເຈົ້າຂອງຮ້ານຂາຍຢາຊັກເຊືອກແຄ່ມຢ່າງຫງອຍເຫງົາ.

-ຜ່ານມາຂ້ອຍຍັງບໍ່ຮູ້ຈັກເລີຍວ່ານາງ ວິນເຫມັກໄປເບີຍອາລົມໃນຍາມເຊົ້າ.

-ຂ້າພະເຈົ້າມິດຢູ່ລໍຖ້າໃຫ້ອີ່ຕາເຖົ້າ ອີກພີ ເຊົາເຕືອງເກິງເລື່ອງສ່ວນຕົວຂອງຜູ້ອື່ນແລ້ວຈຶ່ງໃຫ້ຄຳສັ່ງເກດໄປຢ່າງເຢັນຊາ:

-ອາກາດອົບອຸ່ນຫລາຍ!

ແຕ່ເຈົ້າຂອງຮ້ານຂາຍຢາເປັນຄົນຊູຊີແລະກໍມັກແຊກເຂົ້າໃນເລື່ອງທີ່ບໍ່ແມ່ນເລື່ອງຂອງຕົນ. ລາວຈົ່ມພຸມໆຢູ່ຕະຫລອດ:

- ອີ່ຕາເກົ້າ ບິນ ນັ້ນບໍ່ຄິດຫາວິທີອື່ນທີ່ດີໄປກວ່າໃຫ້ລູກອອກຈາກບ້ານນັ້ນໄດ້ແດ່ບໍ່. ຮື... ຄັນແມ່ນຂ້ອຍແລ້ວ... ແມ່ນວ່າຂ້ອຍບໍ່ເຄີຍກາຍ ເວສະລືອອກໄປຈັກເທື່ອ ແລະຈະບໍ່ໃຫ້ບັກ ແອເດີໄປໃສເດັດຂາດ. ທ່ານຫມໍ ຟລິດ ເວົ້າຖືກແລ້ວ: "ກະທັ້ງຢູ່ເທິງສະຫວັນກໍຍັງຕ້ອງມີຮ້ານຂາຍຢາ ແລະຢູ່ໃນຍຸກພວກເຮົາກໍພໍທີ່..."

ບໍ່ຮູ້ຈັກວ່າລາວໂມໂຫໃນເລື່ອງໃດ ທັນໃດນັ້ນ ເຈົ້າຂອງຮ້ານຂາຍຢາກໍແສ້ຟາດມ້າບາດເຈັບໆແລ້ວແຜດສຽງຂຶ້ນ:

- ຈັ່ງໃດຫະ, ບັກພາກຫຍໍ້!

ບັກ "ພາກຫຍໍ້" ສັດສີ່ຕີນສະເດີດ, ຟັດຫາງ, ສັກຂະໂຍງຂຶ້ນແລ້ວຫອບທະຍານໄປ. ເມືອງແອຊູໂອເຣີ ໄດ້ຫາຍລັບໄປຈາກສາຍຕາເສຍແລ້ວ.

## ຕອນທີ່ສອງ

### I

ກ້າຈະເລົ່າລະອຽດເຖິງຄວາມຫຍຸ້ງຍາກທຸກຢ່າງ ທີ່ໂຫມ່ງລົງໃສ່ຫົວຂອງຂ້າພະເຈົ້ານັບຕັ້ງແຕ່ຕອນເຊົ້າໆທີ່ຝັງໃຈ, ຄາວທີ່ຂ້າພະເຈົ້າຈາກ ແອຊູໂອເຣີ ໄປເພື່ອຊອກຫາກ້ອນເຂົ້າຈີ່ໃນແຕ່ລະມື້ນັ້ນແລ້ວ ມັນກໍຕ້ອງໃຊ້ເວລາ, ເຫື່ອແຮງແລະເຈ້ຍສໍຫລາຍ. ຂ້າພະເຈົ້າຈະຂໍເລົ່າຄືນກ່ຽວກັບເຄາະຮ້າຍບາງລາຍທີ່ໄລ່ຕິດຕາມຕົວຂ້າພະເຈົ້າ, ຊຶ່ງມັນໄດ້ຢັ້ງຢືນເຖິງຊາຕາກໍາອັນສິ້ນຫວັງຂອງຂ້າພະເຈົ້າຢູ່ບົນດາວເຄາະຫນ່ວຍນີ້. ປະກົດວ່າໂລກທັງໂລກໄດ້ຕົກລົງປົງໃຈເອົາໄວ້ວ່າຈະນໍາເອົາແຕ່ເຄາະເຂນເວນຮ້າຍມາສູ່ຂ້າພະເຈົ້າພຽງຜູ້ດຽວນີ້ແຫລະ. ເງິນທີ່ພໍ່ໃຫ້ໄດ້ຫມົດໄປຈາກມືຂ້າພະເຈົ້າຄ້າຍດັ່ງຫິມະທີ່ຕົກລົງໃສ່ເຕົາຮ້ອນວູ່ງ. ຄວາມຫວັງຕ່າງໆກໍມະຫັບມະຫາຍກາຍເປັນເມກຫມອກໄປເຊັ່ນດຽວກັນ. ຫມົດໄພນີ້ຮອດໄພອື່ນກຸອກກຸມລົງໃສ່ຂ້າພະເຈົ້າຢ່າງກະດັດກະດໍ້ເຂົ້ານໍາທຸກມື້.

ຂ້າພະເຈົ້າອາດຈະສາມາດຂຽນຮອດນິພົນຄົ້ນຄ້ວາລະບຽບການຂອງບັນດາຫ້ອງການຮັບຈ້າງຄົນ, ຂ້າພະເຈົ້າມີຄວາມຊິນເຄີຍເປັນຢ່າງດີຕໍ່ການລໍຖ້າວຽກເຮັດງານທຳຢ່າງໄຮ້ຄວາມຫວັງແລະການແລ່ນແບບປ່ວງບ້າໄປຍັງບ່ອນຕ່າງໆທີ່ເຂົາເຈົ້າຊີ້ບອກໃຫ້ ແຕ່ປານນັ້ນ ເມື່ອຂ້າພະເຈົ້າແລ່ນໄປເຖິງຮ້ານຄ້າແຫ່ງໃດແຫ່ງຫນຶ່ງ, ບ່ອນເຊິ່ງເຂົາເຈົ້າຕ້ອງການຄົນບັນຊາຂັ້ນໄດໄຟຟ້າຫລືຜູ້ສົ່ງເອກກະສານໃດຫນຶ່ງນັ້ນ, ກໍພົບຄົນປະເພດດຽວກັນກັບຂ້າພະເຈົ້າຢູ່ແຫ່ງນັ້ນເປັນໂຫລຍໆຫລືບໍ່ກໍໄດ້ຮັບຄຳຕອບ: "ຫາກໍຮັບຄົນຫວ່າງກີ້ນີ້".

ມີເທື່ອຫນຶ່ງ ຂ້າພະເຈົ້າຄຶດວ່າຕົນມີໂຊກ. ມີເຈົ້າຂຸນຄົນຫນຶ່ງຕ້ອງການຈ້າງ ຊາຍຫນຸ່ມສິບຫ້າຄົນພາຍໃນມື້ດຽວ. ເຂົາເຈົ້າລົງປະກາດເລື່ອງນີ້ໃນຫນ້າຫນັງສືພິມ ຊຶ່ງຂ້າພະເຈົ້າໄດ້ຊາບໃນເວລາຕໍ່ມາເຖິງວຽກທີ່ຈະຕ້ອງເຮັດນັ້ນແມ່ນ: ພວກຊາຍຫນຸ່ມເຫລົ່ານັ້ນຈະຕ້ອງນຸ່ງເຄື່ອງທຽມຕາມແບບຂອງບັນດານັກອັດສະວິນແຫ່ງສະຕະວັດທີສິບສີ່ ແລ້ວຢືນຍາມຢູ່ຕາມຂັ້ນໄດຫລວງຕ່າງໆໃນລະຫວ່າງພິທີງານລ້ຽງແລະຕ້ອງທຳຄວາມເຄົາລົບບັນດາແຂກຄົນທີ່ຖືກເຊື້ອເຊີນໄປນັ້ນ. ພວກຂ້າພະເຈົ້າຫຸ້ມກັນໄປສະຫມັກຕັ້ງພັນຄົນ. ພາບແຫ່ງການຍັດແຫຍ້ແຍ່ງຊິງກັນຈັ່ງແມ່ນເປັນຫນ້າສົມເພດ. ເບື້ອງຕົ້ນເຂົາເຈົ້າເລືອກເອົາສາມຮ້ອຍຄົນ. ຂ້າພະເຈົ້າພວດພາດເຂົ້າໄປໃນກຸ່ມຄົນນັ້ນແລະເລັດລອດເຂົ້າໄປໃນເດີ່ນຂອງທ່ານເຈົ້າຂຸນໄດ້, ແຕ່ກໍຄົງເປັນພຽງຜູ້ທີ່ສາມຮ້ອຍຫນຶ່ງ. ຜູ້ຄຸ້ມຄອງກ້າວອອກມາພ້ອມກັບຜູ້ອື່ນອີກສອງສາມຄົນ, ເຂົາເຈົ້າໄລ່ອອກໄປປະມານສອງສ່ວນສາມພໍໃຫ້ເບົາບາງລົງແດ່, ຍັງເຫລືອຢູ່ປະມານຮ້ອຍຄົນທີ່ມີຄວາມຫວັງວ່າຈະໂຊກດີໃນນັ້ນມີຂ້າພະເຈົ້າຜູ້ຫນຶ່ງ. ພວກຂ້າພະເຈົ້າລຽນກັນຢູ່ເປັນສອງແຖວຄືກັບທະຫານກອງກຽດຕິຍົດພວມຢູ່ໃນພິທີການໃດຫນຶ່ງ. ຜູ້ໃດກໍພໍຜູ້ນັ້ນພະຍາຍາມທຳທ່າຂຶງຂັງ, ຍືດເອິກອອກແລະແຂນທັງສອງຍຽດຊື່ລົງຕາມດູກສົ້ງ. ຜູ້ຄຸ້ມຄອງຍ່າງຜ່ານໄປເທື່ອທີຫນຶ່ງ, ທັງຍ່າງໄປທັງແນມເບິ່ງຫນ້າຂອງພວກຂ້າພະເຈົ້າແລະບໍ່ເວົ້າຫຍັງເລີຍ. ເທື່ອທີ່ສອງຫມໍໄດ້ເບິ່ງໄປແຕ່ລະຄົນຄ້າຍດັ່ງຢາກຈະຕີລາຄາເຂົາເຈົ້າແລະຄອນໆກໍໃຊ້ປາຍມືເຕາະແລະເວົ້າ:

– ໄດ້.

ຫນ້າຕາຂອງຄາຍຫນ້າຂອງຂ້າພະເຈົ້າ ໄປຢ່າງເມີນເສີຍປານກັບຢ່າງກາຍກະຕ່າຂີ້ເຫຍື້ອຢູ່ຂອກທາງນີ້ແຫລະ. ຂ້າພະເຈົ້າແນມເຫັນໃບຫນ້າອັນເຢັນຊາ, ກັງເກົາກັບດັງແດງຮູນໆຂອງມັນ ແລະບໍ່ສາມາດລືມໄດ້ໃນຊົ່ວຊີວິດນີ້.

ສິບຫ້າຄົນທີ່ໂຊກດີຢ່າງຕາມຜູ້ຄຸມຄອງຄົນນັ້ນເຂົ້າໄປໃນຫ້ອງການ, ສ່ວນຜູ້ອື່ນໆກໍກເຊີນໃຫ້ຫອບສັງຂານພິກອອກຈາກເດີ່ນໄປຢ່າງສຸພາບ.

ການຊອກຫາວຽກເຮັດງານທໍາໂດຍອີງໃສ່ຄໍາປະກາດເທິງຫນ້າຫນັງສືພິມນັ້ນ ແມ່ນບໍ່ເປັນຜົນສາແລ້ວ, ຂ້າພະເຈົ້າເລີຍຕົກລົງໃຈໄປຊອກສະແຫວງຫາບັນດາຫ້າງຮ້ານ, ບັນດາຫ້ອງການ, ບັນດາຮ້ານແດກເງິນ, ບັນດາຮ້ານຕັດພົມ, ຮ້ານຂາຍຊີ້ນ, ຮ້ານຂາຍຜັກເພື່ອຂໍວຽກເຮັດງານທໍາ. ໃບປະກາດສະນີຍະບັດມັດທະຍົມທີ່ຂ້າພະເຈົ້ານໍາອອກມານັ້ນບໍ່ໄດ້ກໍ່ຄວາມຮູ້ສຶກຫຍັງເລີຍໃຫ້ເຈົ້າຂອງຫ້າງຮ້ານຕ່າງໆແລະ ເຂົາກໍລ້ວນແຕ່ປະຕິເສດຂ້າພະເຈົ້າໂລດ. ແຕ່ແລ້ວເຈົ້າຂອງຮ້ານຢາສູບທີ່ຢູ່ແຈກະຫນົນ ບຣາຍ ທີ່ສະຫນາມຫລວງ ປານແມສະເດີນ, ເປັນຊາຍຊະລາສະອາດສະອ້າງຜູ້ຫນຶ່ງໃສ່ແວ່ນຕາແລະສວມເສື້ອກັກແບບບູຮານນັ້ນກັບມີຄວາມສົນໃຈຂ້າພະເຈົ້າ, ເມື່ອຂ້າພະເຈົ້າສະເຫນີຕົນເອງແລະເອົາໃບປະກາດສະນີຍະບັດໃຫ້ເກົ້ານັ້ນເບິ່ງ.

- ຂ້ອຍຍິນດີທີ່ສຸດ, ເພື່ອນຜູ້ຫນຸ່ມນ້ອຍເອີຍ, - ເກົ້າເວົ້າທັງລໍ່ແຍງຮູບຫົວສິງໂຕຢູ່ເທິງຕາປະທັບຂອງວິທະຍາໄລ ດີຢັງ. - ນີ້ ເຈົ້າຮູ້ຈັກບໍ່, ຂ້ອຍບໍ່ມັກສິງໂຕນີ້ປານໃດ. ຂ້ອຍຢາກຈະເວົ້າວ່າມັນບໍ່ເປັນຕາຢ້ານຈັກຫນ້ອຍເລີຍ. ຫະ? ດີຢັງ ຫວະ? ດີຫລາຍ...

ເກົ້ານີ້ຫູຫນວກ, ແລະຂ້າພະເຈົ້າຈໍາເປັນຕ້ອງໄດ້ແຜດໃສ່ຫູລາວ:

- ຂ້າພະເຈົ້າຕ້ອງການເຮັດວຽກ!...

ເກົ້າແນມເບິ່ງຂ້າພະເຈົ້າແບບຫວາດກົວ.

- ວຽກເຮັດຫວະ? ນາມສະກຸນເຈົ້າແມ່ນ ບົນ ຫວະ?

- ແມ່ນແລ້ວ, ຂ້າພະເຈົ້າບໍ່ສາມາດຈະຮຽນຕໍ່...

-ຟ້າວກ່ອນ... -ເຖົ້າເກົາໆງວງດັງດ້ວຍວາດຄົ້ນຄິດ. -ບາງທີຂ້ອຍຄືໄດ້ອ່ານພົບຊື່ຂອງເຈົ້າຢູ່ໃສ... ແມ່ນເຈົ້ານີ້ເອງຫວະ?

-ຂໍໂທດກັບທ່ານ, ຂ້າພະເຈົ້າບໍ່ເຂົ້າໃຈ...

ຕານ້ອຍໆທັງຄູ່ຂອງເຖົ້າເຕັມໄປດ້ວຍຄວາມສະຫລອກກອກ.

-ໂອ, ໂອ, ປິນ ແມ່ນເຈົ້ານີ້ເອງເດນໍ, ຜູ້ເຊິ່ງໄດ້ຮັບການອຸປະກາລະຈາກທ່ານ ລໍເດີ ປາກລິນເຕິນ...

-ແມ່ນແລ້ວ! -ຂ້າພະເຈົ້າອຸທານຂຶ້ນ ແລະຫວັງວ່າອີ່ຕາເຖົ້ານີ້ຊິຮັບເອົາຂ້າພະເຈົ້າເຂົ້າເຮັດວຽກຢູ່ໃນຮ້ານຂາຍຢາສູບ "ສິງໂຕຈັກຂີນ" ເພື່ອໃຫ້ຂາຍຢາຊີກາແລະຢາສູບຊະນິດຕ່າງໆນຳເພິ່ນ.

ແຕ່ທັນໃດນັ້ນ ເຖົ້ານີ້ກໍທືບຕີນຕຸບຕັບຕຸບຕັບຂຶ້ນ.

-ເຊົາ! ເຈົ້າຮູ້ຈັກບໍ່ວ່າຂ້ອຍເປັນຄົນກີເດີມ ແລະຂ້ອຍຈະບໍ່ອາດອະນຸຍາດໃຫ້ຄົນຢ່າງ... ໂທ່, ໂທ່, ບ່າວນ້ອຍເອີຍ, ເຈົ້າຄວນອັບອາຍແດ່ຕີ...

ຂ້າພະເຈົ້າທ່ຽວຊັດເຊພະເນຈອນ ແລະອຶດຫິວຕັ້ງສາມມື້ຢູ່ຕາມທ່າກຳປັ່ນຕ່າງໆ. ກັບຕັນເຮືອກຳປັ່ນບັນທຸກສິນຄ້າ "ປາອານິບ" ພົບກັບຂ້າພະເຈົ້າຢູ່ທ່າກຳປັ່ນ. ເພິ່ນເປັນຫມູ່ຂອງລຸງຂ້າພະເຈົ້າຢູ່ທີ່ຮ້ານອາຫານ "ລາຊາເສືອ", ເພິ່ນຈື່ຂ້າພະເຈົ້າໄດ້. ໄດ້ຍິນຂ້າພະເຈົ້າເວົ້າເຖິງປະກາດສະນີຍະບັດມັດທະຍົມ, ເພິ່ນມີແຕ່ຈຸກສືບເຂົ້າແລ້ວກໍວອດບາດຫນຶ່ງແບບກະລາສີເຮືອ.

-ສິນຄ້າອັນນັ້ນຂອງຫລານເຂົາເຈົ້າບໍ່ຮັບປະທານໄດ້ດອກ... ຫລານເອີຍຈົ່ງສອດຕາແນມເບິ່ງໂລກມະນຸດຢູ່ໃຕ້ຟ້ານີ້. ຫາລະບ່ອຍປະໃຫ້ພາຍຸຝົນລົມແດງເຮັດໃຫ້ຫລານເປັນຄົນກ້າຫານຂຶ້ນຕື່ມສາກ່ອນ. ນັ້ນແມ່ນບັນຫາທີ່ຜູ້ເຊິ່ງເຄີຍລ່ອງໄຫລໄປຕັ້ງສີ່ມະຫາສະຫມຸດໃນໄລຍະເວລາຊາວສາມປີເຊັ່ນດັ່ງລຸງນີ້ຢາກຈະເວົ້າກັບຫລານ. ປິນເອີຍ, ລຸງຂອງຫລານເປັນຄົນດີຜູ້ຫນຶ່ງ, ເພື່ອລາວລຸງຕຽມພ້ອມຈະຊິດຊ່ວຍຫລານ. ຫລານຈົ່ງເຊື່ອຟັງລຸງ, ຈົ່ງຂຶ້ນໄປຮັບຈ້າງຢູ່ໃນກຳປັ່ນແລ້ວຢາກໄປໃສຈຶ່ງໄປຕາມມັກ, ຕ້ອງຜົນຫນ້າທັ່ງໃຫ້ເປັນເຂັ້ມ,

ເຂົ້າໃຈດີ? ລຸງຈະເວົ້າວ່າຫລານເປັນຄົນທ້ອງຖິ່ນດຽວກັນ ແລະຂໍໃຫ້ຫລານໄດ້ໄປໃນກຳປັ່ນບັນທຸກກ່ານເປັນກຳມະກອນຢູ່ຫັ້ນ ແລະຫລານກໍບໍ່ຈຳເປັນຈະຈ່າຍເງິນໃຫ້ລຸງດອກ, ເອົາບໍ່?

- ດີກລີງ, - ຂ້າພະເຈົ້າຕອບແບບຊາວເຮືອຢູ່ ແອຊູໂອເຣີ ເຄີຍເວົ້າ.

ແລ້ວການຫັດສະບາຈອນຂອງຂ້າພະເຈົ້າກໍເລີ່ມຕົ້ນ.

ກຳປັ່ນບັນທຸກກ່ານລຳນັ້ນທາສີຂີ້ເທົ່າຄົມ, ມັນມີທ້ອງເປັນຜົ້ງໃຫຍ່, ປຽກຊຶມໄປດ້ວຍນ້ຳມັນເຊື້ອເພີງແລະຂີ້ຕົມອັນເປິເປື້ອນ, ເຊິ່ງສິ່ງກິ່ນເຫມັນສາບຕັ້ງແຕ່ຈອມເສົາກະໂດງລົງຈົນຮອດພື້ນກຳປັ່ນ. ມັນມີຊື່ວ່າ "ແມວຂຽວ" ຊຶ່ງປະກົດວ່າເປັນຊື່ທີ່ອ່າວແປກປະຫລາດ. ເພາະວ່າແມ້ແຕ່ບວກນ້ອຍໆ ແມວມັນກໍບໍ່ເຄີຍລົງລອຍຈັກເທື່ອ ກຳປັ່ນບັນທຸກກ່ານນີ້ຄອນງ້ອກແງ້ກແມ້ແຕ່ໃນເວລາທີ່ພາງຽບທະເລສະຫງົບ. ຜູ້ທີ່ເຮັດວຽກຢູ່ໃນກຳປັ່ນເຫລັ້ມນີ້ເປັນຊາວຈີນເກືອບຫມົດ. ວຽກງານຕ່າງໆທີ່ຈະຕ້ອງເຮັດຢູ່ເທິງກຳປັ່ນເຫລັ້ມນີ້ເປິ ເປື້ອນສຸດຂີດ. ບາງທີອາດເປັນຍ້ອນວ່າທ່ານ ກັບຕັນ ກຳປັ່ນສິນຄ້າຢາກຈະທົດລອງຂ້າພະເຈົ້າ ດັ່ງນັ້ນເພິ່ນຈຶ່ງແນະນຳຂ້າພະເຈົ້າກັບ ກັບຕັນກຳປັ່ນ "ແມວຂຽວ". ກັບຕັນ ດະຍົງແກຣັບ ບໍ່ເປັນຄົນເວົ້າຍາກປາກຍາວ. ເພິ່ນເວົ້າວ່າ:

- ຂ້ອຍຊິຮັບເອົາເຈົ້າ. ເຂົ້າເຮັດວຽກຢູ່ຫ້ອງບັນຊາຄວາມຮ້ອນ. ຕ້ອງຟັງກ້ອຍຟັງຄວາມ. ກ້າລະເມີດຈະຖືກລົງໂທດ.

ແລ້ວຂ້າພະເຈົ້າກໍຖືກຊັບຊ້ອນເຂົ້າໃນຫນ່ວຍຊ່ວຍຊ່າງດັງໄຟ ພ້ອມກັບຄົນຈີນຕັ້ງເຕົ່າໂຫລ. ຂ້າພະເຈົ້າປະຕິບັດວຽກງານນີ້ຢ່າງດູດດື່ມ. ຂ້າພະເຈົ້າຮູ້ສຶກພູມໃຈທີ່ຕົນເອງສາມາດຜ່າຜືນກົດເກນຊຶ່ງຄົນທັງຫລາຍໄດ້ກຳຫນົດໃຫ້ແກ່ຂ້າພະເຈົ້າ.

ການເດີນທາງໄປຍັງທິດຕາເວັນຕົກຢູ່ໃນທ້ອງຂອງຍັກທະເລທີ່ເປື້ອນເປິ ລຳນີ້ ເຮັດໃຫ້ຂ້າພະເຈົ້າຫມົດເຫື່ອຫມົດແຮງ. ເບື້ອງຕົ້ນ, ພວກຮ່ວມງານມີທ່າທີລະແວງແລະຫຍໍ້ຫຍັນຂ້າພະເຈົ້າ. ແຕ່ພາຍຫລັງທີ່ຝຸ່ນກ່ານດຳໆເຂົ້າມາຕິດຫນ້າທຸກໆຄົນໃນກຸ່ມຂອງພວກຂ້າພະເຈົ້າຈົນເປັນຊັ້ນຫນາໆ, ແລ້ວການພົວພັນລະຫວ່າງຂ້າພະເຈົ້າກັບເຂົາກໍນິ່ມນວນກ່ວາເກົ່າ. ໃນເວລາທຳງານຢູ່ນັ້ນ ຂ້າພະເຈົ້າໄດ້ຮຽນແລະເຂົ້າໃຈພາສາຈີນສອງສາມຄວາມ, ແລະຂ້າພະ

ເຈົ້າພໍໃຈທີ່ສຸດຕໍ່ການໂອ້ລົມກັບລຸງ ຊາ ຜູ້ມີແຂ້ວຂາວ ແລະບັກກ້າມຕາຊີທີ່ມີເຮືອນຮ່າງຕ່ຳເຕີຍ, ເພາະເຖິງຈັ່ງໃດ ຂ້າພະເຈົ້າກໍຕ້ອງໄດ້ໂອ້ລົມກັບທຸກໆຄົນເຫລົ່ານັ້ນດ້ວຍພາສາທີ່ເຂົາເຈົ້າບໍ່ໄດ້ສອນໃຫ້ຂ້າພະເຈົ້າຢູ່ໃນວິທະຍາໄລ.

ເມື່ອຍ່າງຕີນຂຶ້ນສູ່ຝັ່ງແຫ່ງໂລກໃຫມ່*, ຕົນຕົວຂອງຂ້າພະເຈົ້າໄດ້ລົດນ້ຳຫນັກລົງເຖິງເກົ້າກິໂລ, ທັງເປື້ອນເປິ ຖືພີສາງຄາງລາຍໂຕຫນຶ່ງ, ແຕ່ກໍມີເງິນຢູ່ໃນກະເປົາ. ຢູ່ແຫ່ງນີ້ ຂ້າພະເຈົ້າອາດສາມາດເລີ່ມຕົ້ນດຳເນີນຊີວິດຢູ່ເທິງບົກໄດ້ແລ້ວ. ເມື່ອຄິດເຖິງການເດີນທາງທາງທະເລມາຍາມໃດ ມັນໄດ້ເຮັດໃຫ້ຂ້າພະເຈົ້າສັ່ນຫມາກຫນາວຂຶ້ນມາກັບຫມ້ອງ.

ບັນດາຫລັງເຮືອນສູງສຽບຟ້ານັ້ນຊວນໃຫ້ຂ້າພະເຈົ້າຫວນຄິດເຫັນຜາຫີນຢູ່ ແອຊໂອເຣີ, ສ່ວນກະຫນົນຫີນທາງນັ້ນປຽບດັ່ງຮ່ອມພູຕ່າງໆ. ຂ້າພະເຈົ້າເຄີຍໄດ້ເປັນກຳມະກອນແບກຫາມ, ເປັນຄົນຕິດປ້າຍໂຄສະນາໃຫ້ແກ່ໂຮງມະໂຫລະສົບຕ່າງໆ, ຂາຍຫນັງສືພິມແລະຂາຍສາຍເກີບ. ເຂົ້າປຽກນົກນ້ອຍໃສ່ເຂົ້າຜ້າງພ້ອມດ້ວຍເຂົ້າຈີ່ຕ່ອນຫນຶ່ງໄດ້ກາຍເປັນອາຫານປະຈຳວັນຂອງຂ້າພະເຈົ້າ. ແລະໃນທີ່ສຸດຂ້າພະເຈົ້າກໍມີໂຊກ...

## II

ຂ້າພະເຈົ້າໄປຮອດ ແບັນຮັກບໍ ແບບບັງເອີນ. ລາງລົດໄຟຈາກຕົວເມືອງໄປສູ່ແຫ່ງນັ້ນ ຖືກເບັ່ງໃສ່ຂົວ ເບຕົງຕ່ຳໆທີ່ເກືອບພຽງກັບ ຫນ້ານ້ຳ, ເບິ່ງແລ້ວຄືກັບກັບວ່າລົດໄຟພວມແລ່ນຢູ່ເທິງຄື້ນຟອງຂອງອ່າວແບັນບາຍ. ແບັນຮັກບໍ ເປັນສະຖານທີ່ຕາກອາກາດແຫ່ງຫນຶ່ງທີ່ຢູ່ໃກ້ກັບຕົວເມືອງ, ຕັ້ງຢູ່ເທິງຝັ່ງມະຫາສະຫມຸດ. ເຮືອນຫລັງຕ່າງໆມີສີສັນສົດຊື່ນ, ມີລັກສະນະແບບດຽວກັນເກືອບຫມົດທຸກຫລັງ, ລຽນເປັນສາຍຊື່ເນັ່ງອອກໄປ, ເຮືອນຫລັງໃດກໍມີຊານຕາກອາກາດມີຜ້າກັ້ງລາຍແຊກ ແລະມີຫນານດອກໄມ້ຢູ່ຫນ້າປະຕູ. ຢູ່ນີ້ບໍ່ມີຕົ້ນໄມ້ຫລາຍ, ແຕ່ແທນສິ່ງນັ້ນ ເຂົາເຈົ້າໄດ້ປູກຫນານຫຍ້າອັນງົດງາມ, ຂຽວຊຸ່ມຄ້າຍດັ່ງ

---

* ທະວີບອາເມລິກາ.

ທານ້ຳສີໄວ້ຊັ້ນຫນຶ່ງ, ແລະປູກຕົ້ນດອກໄມ້ນຳອີກ. ເສັ້ນທາງປູຢາງສາຍຫນຶ່ງເນັ່ງເລາະລຽບໄປຕາມຝັ່ງທະເລ. ຢູ່ລະຫວ່າງເສັ້ນທາງກັບທະເລນັ້ນແມ່ນ ທ່າອາບນ້ຳອັນກ້ວາງໃຫຍ່ທີ່ເຕັມໄປດ້ວຍດິນຊາຍນວນ. ແບັນຮັກບໍ່ຖືກັນວ່າ ເປັນບ່ອນອາບນ້ຳທະເລທີ່ມີຊື່ສຽງແຫ່ງຫນຶ່ງ.

ຮ້ານໂດດໃຫຍ່ອັນຫນຶ່ງເຮັດໃຫ້ຂ້າພະເຈົ້າເກີດມີຄວາມສົນໃຈ.

ຂ້າພະເຈົ້າຖາມບູລຸດຜູ້ຫນຶ່ງທີ່ພວມນອນສູບກອກຢູ່ເທິງຂີ້ຊາຍ ດ້ວຍສີຫນ້າທີ່ສະແດງອອກເຖິງຄວາມເບື່ອຫນ່າຍຢູ່. ລາວຕອບມາພໍພຸມໆວ່າ:

- ອາ, ເຈົ້າຖາມ ຫໍ ບາບີລອນ* ນີ້ຫວະ? ເຂົາເຈົ້າສ້າງມັນເພື່ອ ແບລັກສະເບັກ... ຈັ່ງໃດ, ເຈົ້າບໍ່ຮູ້ຈັກແບັກສະເບັກເປັນໃຜຊັ້ນຫວະ? - ບູລຸດຄົນນັ້ນມີສີຫນ້າສົດຊື່ນຂຶ້ນຈົນເຫັນໄດ້ແຈ້ງແລະນອນຂວ້ຳທ້ອງລົງໃສ່ຂີ້ຊາຍຮ້ອນ. - ຮຶ່ມ, ຂ້ອຍຕວງວ່າເຈົ້າບໍ່ແມ່ນຄົນກີນນີ້. ເອົາລະ, ຂ້ອຍຊິເວົ້າໃຫ້ເຈົ້າຮູ້ວ່າ ແບລັກສະເບັກຂອງພວກຂ້ອຍເປັນຊຸມພົນກິລາຜູ້ຍິ່ງໃຫຍ່ກ່ວາເພິ່ນຫມົດໃນໂລກນີ້ທາງດ້ານກິລາບັ່ງກາບິ່ນໂຕດ້ວຍລີລາຕ່າງໆ, ມື້ຮື ຢູ່ບ່ອນນີ້ຈະມີການແຂ່ງກິລາໂດຍມີລາວເຂົ້າຮ່ວມນຳ. ຜູ້ຊົມນັບເປັນແສນໆຄົນຈະມາໂຮມກັນຢູ່ແຫ່ງນີ້ ເພື່ອຊົມເຊີຍບຸລຸດຜູ້ໃຈກ້ານັ້ນ.

- ວິເສດ, - ຂ້າພະເຈົ້າເວົ້າແລ້ວນັ່ງເອະລົງ.

- ເອົາ, ຈ່າຍມາສິບອັດ, ບໍ່ຊັ້ນຫນີໄປຈາກຫນີ້ໄກໆ. - ລາວສະເຫນີຂຶ້ນມາຢ່າງກະທັນຫັນ.

- ຈ່າຍຄ່າຫຍັງລະ? - ຂ້າພະເຈົ້າແປກໃຈ.

- ຂ້ອຍຈ່ອງບ່ອນໄວ້ໃຫ້ຕົນເອງກວ້າງປະມານສາມສິບຟຸດກາເຣ, ເຈົ້າເຫັນບໍ່ລະ? - ລາວເວົ້າແລະຫັນຫລັງລົງ, ນອນຢຽດສອງແຂນສອງຂາອອກມາສະແດງວ່າລາວໄດ້ຈ່ອງບ່ອນໄວ້ຢູ່ເທິງຫາດຊາຍນັ້ນແທ້. - ນັບແຕ່ແລງມື້ນີ້ເປັນຕົ້ນໄປ, ຜູ້ຊົມຈະເລີ່ມມາເຕົ້າໂຮມກັນຢູ່ນີ້ ເພື່ອຈະເບິ່ງສະເບັກໃຫ້ຄັກໆ. ຖ້າແນມໄປແຕ່ພີ້ແລ້ວ, ເຖິງແມ່ນຄົນຕາດີວກໍ່ຈະ

* ຫາດບາບີລອນ ຕາມຄຳພີສາສະຫນາຄຣິດ ເຂົາເຈົ້າຄິດວ່າຈະສ້າງຫາດນີ້ສູງພຽງຟ້າ, ແຕ່ບໍ່ສຳເລັດຜົນ (ຜູ້ແປ).

ແນມເຫັນການຫລິ້ນກ້າມຂອງຜູ້ຊະນະເລີດນັ້ນໄດ້ຢ່າງຊັດເຈນ. ຍ້ອນແນວນັ້ນ ຂ້ອຍຈຶ່ງວາງລາຄາໃນບ່ອນຂ້ອຍຈ່ອງນີ້ຫນຶ່ງພຸດຕໍ່ສິບອັດ. ຮອດຄໍ່າລາຄາຈະຂຶ້ນອີກ. ຖ້າເຈົ້າໄປຈ່ອງບ່ອນໄວ້ພຸ້ນບ່ອນຫນຶ່ງແລະນັ່ງຢູ່ຫັ້ນຈົນກ່ວາຕາເວັນຕົກ ແລ້ວເຈົ້າກໍຈະສາມາດຫາກໍາໄລໄດ້ຮອດຫ້າສິບສ່ວນຮ້ອຍ.

ເປັນທີ່ແຈ້ງຂາວວ່າ ເພິ່ນຜູ້ໃຫຍ່ຕຸ້ຍ, ມີສາຍຕາຫລັກແຫລມນີ້ໄດ້ເຢີ້ຍຂ້າພະເຈົ້າ. ຂ້າພະເຈົ້າຄຶດຫາທາງແກ້ແຄ້ນຢູ່ຢ່າງງຽບໆ. ເວົ້າແລ້ວຮ້ານໂດດນັ້ນຕັ້ງສູງພິລຶກແທ້. ທີ່ດີຍັງ, ບ່ອນເຊິ່ງຂ້າພະເຈົ້າກຶກຂະຫນານນາມວ່າເປັນມືລອຍນໍ້າທີ່ເກັ່ງສຸດນັ້ນ, ເຂົາເຈົ້າບໍ່ໄດ້ພົບຮ້ານໂດດສູງແບບນີ້ ເລີຍ.

- ເກືອງຈັ່ງໃດຂ້ອຍກໍຍັງຖືວ່າ ສະເບັກ ຂອງເຈົ້າບໍ່ສາມາດຈະປິ້ນອ້ອມໂຕສາມຮອບທັງຕີລັງກາໄປພ້ອມໆກັບໃນຂະນະທີ່ໂຕນລົງນໍ້ານັ້ນໄດ້, - ຂ້າພະເຈົ້າເວົ້າແລະຄອນໆກໍເສືອກຕາເບິ່ງເຂົາແລ້ວຫົວ.

- ຮື, ແຕ່ນີ້ລອດທ້ອງແມ່ມານີ້ກໍບໍ່ທັນເຫັນໃຜສາມາດເຮັດແບບນັ້ນໄດ້, ຈິມີແຕ່ພີຍັກເທົ່ານັ້ນບຸທີ່ເຮັດໄດ້ ຕອນມັນຕົກລົງຈາກຟ້າມາສູ່ນາຮີກ. ຢ່າເຍີ່ ທ້າວໂງ່ເອີຍ, ເຈົ້າບໍ່ຕ້ອງເວົ້າເກືອງເລື່ອງທີ່ລື່ນເຫລືອໄປຈາກກໍາລັງແຫ່ງຄວາມຮອບຮູ້ຂອງເຈົ້າດອກ...

- ສ່ວນເຈົ້າຫັ້ນ, ດີທີ່ສຸດຫາລະຈ່າຍມານີ້ສິບອັດ. ຂ້ອຍຊິເຮັດໃຫ້ເຈົ້າເຫັນກະໄດ້ເລື່ອງຂີ້ຝອຍແບບນັ້ນ, ແລະເຈົ້າກໍຄວນຈະປະກາດໃຫ້ມວນຊົນຮູ້ຈັກແດ່ວ່າ ເພື່ອມື້ຮືນີ້ເຂົາເຈົ້າບໍ່ຕ້ອງມາກິນສົມບັດຫຍັງຢູ່ນີ້ອີກ.

ຂ້າພະເຈົ້າດູຫມິ່ນເຂົາຄືນ.

- ກູຊິຈ່າຍໃຫ້ຫນຶ່ງດອນລາ ຖ້າມຶງເຮັດແບບນັ້ນໄດ້, - ເຂົາເວົ້າຢ່າງໂມໂຫ. - ນີ້, ບັກອັນຕະພານ, ມຶງຫົວຫວະ, ກູຊິຕ່ອຍມຶງໃຫ້ບັດໄປຈັກບາດກ່ອນນ່າ ເພື່ອໃຫ້ມຶງຊິໄດ້ກຶມສັນດານຫົວເຍາະເຢີ້ຍແບບນັ້ນ.

ເຂົາພູດລຸກຂຶ້ນ, ແລະໃບຫນ້າຂອງເຂົາເບິ່ງແລ້ວເປັນຕາຫນ່າຍທີ່ສຸດ.

- ເຕັ້ນເທາະແມ້, ບັກໂງ່. - ມັນແຜດສຽງຂຶ້ນແລະຈາກທ່າທີໂອຫັງມັງມໍຂອງເຂົານັ້ນຂ້າພະເຈົ້າຮູ້ໄດ້ໂລດວ່າ ຕັ້ງແຕ່ເຊົ້າມານີ້ ເຂົາຄືຊິໄດ້ຫລ່ອງວິດສະກີ ລົງໄປແລ້ວ, ເຂົາຈັບ

ຄໍເສື້ອຂ້າພະເຈົ້າ: - ກູຢາກເຫັນມຶງຕີລັງກາປິ່ນສາມຮອບແບບໃດ. ໂຄດແມ່ມຶງ, ສະເປັກເອງກໍເຮັດໄດ້ແຕ່ສອງຮອບເທົ່ານັ້ນ!

ຫມໍທີ່ນັກກິລາອຸບາດນັ້ນລາກຂ້າພະເຈົ້າໄປໃສ່ຕີນຮ້ານໂດດ. ຂ້າພະເຈົ້າພຶດອອກແລະກໍາມືເຂົ້າວ່າຊິຊົດມັນຈັກຫມັດ.

- ນີ້ ບັກຂີ້ໂມ້ເອີຍ, ຫາລະຈິກດາອອກມາເບິ່ງ, ແລະເອົາເງິນອອກມາໄວ້ພ້ອມ. ກູຊິທຸບງູດໍາ* ຂອງມຶງໃຫ້ແຫລກ.

ແຕ່ເຂົາຊ້ໍາຈັບຂ້າພະເຈົ້າອີກ.

- ປີນຂຶ້ນ, ມຶງຕ້ອງໂດດ, ບໍ່ຊັ້ນກູກືນກິນມຶງດຽວນີ້!

ເຂົາຊຸກຂ້າພະເຈົ້າ, ເພື່ອບໍ່ໃຫ້ລົ້ມ ຂ້າພະເຈົ້າຄຸບໃສ່ຮາວພະນັກຂອງຮ້ານໂດດ. ຈາກບ່ອນນັ້ນສາມາດປີນຂຶ້ນໄປດ້ວຍຂັ້ນໄດແຄບໆ. ເວລາຈັບລູກຂັ້ນໄດນັ້ນ ຂ້າພະເຈົ້າກໍເກີດມີຄວາມຮູ້ສຶກຊິນເຄີຍຕໍ່ການເປັນນັກກິລາຂອງຕົນຢູ່ ດີຢັງ. ຂ້າພະເຈົ້າເຄີຍມີຊື່ສຽງຍ້ອນປະດິດບັນດາຈັງຫວະປະສົມທີ່ສັບສົນທີ່ສຸດໃນເວລາເຕັ້ນລົງມາແຕ່ເທິງຮ້ານໂດດ. ແຕ່ຂະນະນີ້ ຂ້າພະເຈົ້າຕ້ອງຄຶດຫາວິທີຕີລັງກາປິ່ນກາຍ ເພື່ອເອົາຊະນະການພະນັນຫນຶ່ງດອນລານັ້ນ, ເພາະວ່າຢູ່ໃນຖົງຂອງຂ້າພະເຈົ້າບໍ່ເຫລືອເງິນພໍອັດເລີຍ.

ຮ້ານໂດດນັ້ນ ຖືກກໍ່ສ້າງຂຶ້ນມາຢ່າງງົດງາມແລະດີຫລາຍ, ສ່ວນຢູ່ເທິງສຸດນັ້ນແມ່ນເວທີນ້ອຍໆອັນຫນຶ່ງບໍ່ມີຮອດຮາວຈັບຊ້ໍາ. ຈາກເວທີນັ້ນ ມີແປ້ນຍາວແຜ່ນຫນຶ່ງເດ່ອອກສູ່ທະເລ, ມັນສາມາດໂຍບລົງໂຍບຂຶ້ນໄດ້ຄືລໍຊໍ. ຂ້າພະເຈົ້າແກ້ເຄື່ອງອອກແລະຢຶດຕົວຂຶ້ນຊື່ໆ. ຕໍ່ຫນ້າຂອງຂ້າພະເຈົ້າແມ່ນຄວາມຫວ່າງເປົ່າທ້ອງຟ້າບໍ່ມີເມກພໍປ່ຽງ ແລະຫນ້ານ້ໍາທະເລນັ້ນກວ້າງໄກໄພສານຍິ່ງ.

ຂ້າພະເຈົ້າຄຶດ: ບາງທີຢູ່ເບື້ອງນັ້ນຂອງມະຫາສະຫມຸດ ເທິງຝັ່ງ ແອຊູໂອເຣີ ພຸ້ນ, ຂະນະນີ້, ເອດີ ຄົງຈະຢືນແນມມາທາງຂ້າພະເຈົ້າຢູ່...

ເຮືອນ້ອຍສອງເຫລັ້ມພວມແລ່ນຢູ່ທາງລຸ່ມ. ບາງທີເຂົາເຈົ້າອາດພວມແນມເຫັນຂ້າພະ

---

* ແບ້ລັກສະເປັກ - ພາສາອັງກິດ ແມ່ນ ງູດໍາ.

ເຈົ້າເພາະພວກພວມອາບນ້ຳທະເລຢູ່ສອງຟາກຂ້າງລ້ວນແຕ່ພວມລອຍມາທາງຮ້ານໂດດ. ຜູ້ຊົມໄດ້ມາເຕົ້າໂຮມກັນຢູ່ຕາມຝັ່ງຢ່າງວ່ອງໄວ.

ລົມເຢັນສາຍໜຶ່ງພັດຜ່ານໄປພາໃຫ້ຂ້າພະເຈົ້າສະບາຍອາລົມຂຶ້ນ. ຂ້າພະເຈົ້າຍ່າງໄປເທິງແຜ່ນແປ້ນນັ້ນ. ມັນດັງກ໊ອດໆແກດໆຢູ່ລຸ່ມຕີນຂອງຂ້າພະເຈົ້າແລະຄ່ອຍໆຍວບລົງໄປ. ຜ່ານມາຍັງບໍ່ເຄີຍມີຈັກເທື່ອທີ່ຂ້າພະເຈົ້າຈະຢ້ານກົວຕໍ່ຄວາມເປົ່າຫວ່າງ ແລະຂ້າພະເຈົ້າເຄີຍຍ່າງໄປຍ່າງມາຢ່າງເປັນປົກກະຕິຢູ່ເທິງປາກເຫວເລິກໂດຍບໍ່ລາຍຕາເລີຍ. ກຳລັງແຮງແຫ່ງຄວາມຊິນເຄີຍມັນເປັນເຊັ່ນນັ້ນແລ້ວ. ຢຸດຢູ່ຫ່າງຈາກສົ້ນແປ້ນນັ້ນກ້າວໜຶ່ງ, ຂ້າພະເຈົ້າແນມລົງເບື້ອງລຸ່ມ. ຈາກທີ່ສູງນັ້ນ ຂ້າພະເຈົ້າແນມເຫັນທຸກສິ່ງທຸກຢ່າງໄດ້ຢ່າງຈະແຈ້ງເຖິງຂັ້ນສາມາດຈຳແນກປະກາຍຂອງເກັດປາທີ່ຢູ່ລຸ່ມພື້ນນ້ຳອັນຂຽວໃສນັ້ນໄດ້ ໂດຍອາໄສແສງແດດຈາກດວງອາທິດທີ່ສາຍສ່ອງລົງມາ.

ທັນໃດນັ້ນ ຂ້າພະເຈົ້າເຫັນຄົນຜູ້ໜຶ່ງພວມລອຍຢູ່ເບື້ອງລຸ່ມ. ລາວຍົກມືຄວັກໆຄວ້າງແລ້ວກໍຫາຍລັບໄປຈາກໜ້ານ້ຳ. ຂ້າພະເຈົ້າແນມເຫັນໄດ້ແຈ້ງວ່າ ລາວພວມຈົມລົບໆລົງສູ່ພື້ນນ້ຳ. ຄົນຜູ້ໜຶ່ງພວມຕາຍດຶກນ້ຳ. ຈະຕ້ອງຊິດຊ່ວຍດ່ວນ. ຂ້າພະເຈົ້າໃຊ້ສຸດກຳລັງກົບຕີນລົງໄປ, ແລະກໍໃນຊົ່ວພິບຕາດຽວ ແຜ່ນແປ້ນທີ່ເຮັດເປັນຂົວນັ້ນກໍດີດຂ້າພະເຈົ້າຂຶ້ນສູງໆ. ເວລາຕົກລົງນັ້ນ ຂ້າພະເຈົ້າຫັນຕົວຮອບໆເລົາຄີງຂອງຕົນພ້ອມກັນນັ້ນ ກໍຕີລັງກາຮອບໜຶ່ງຍາວໆ. ແລະໃນທີ່ສຸດ ຂ້າພະເຈົ້າກໍພະຍາຍາມຢຽດມືອອກຊື່ໆ ສັນຊາດຍານເຕືອນໃຫ້ຮູ້ວ່າຕົນພໍ່ຈະພຸ່ງຕົວລົງສູ່ໜ້າທະເລແລ້ວ.

ເວລາມືນຕາຢູ່ໃຕ້ນ້ຳນັ້ນ, ຂ້າພະເຈົ້າແນມເຫັນຮູບຮ່າງພໍມົວໆຂອງຄົນຕາຍດຶກນ້ຳ, ຄຸບເອົາລາວແລ້ວກໍດຶງຂຶ້ນມາ.

ຫລັງຈາກນັ້ນ ກໍປະກົດມີໃຜຜູ້ໜຶ່ງຫຍວມເອົາຜົມຂອງຂ້າພະເຈົ້າໄວ້... ເມື່ອຟື້ນສະຕິຂຶ້ນມາ, ຂ້າພະເຈົ້າເຫັນຕົວເອງນອນຢູ່ເທິງຝັ່ງ. ຢູ່ກາງກຸ່ມຊົນອັນຄັບຄາໜາແໜ້ນ. ພາຍຫລັງທີ່ດື່ມວິດສະກີໄປແລ້ວອີກໜຶ່ງທີ່ບັນຈຸຢູ່ຈອກນ້ອຍໜ່ວຍໜຶ່ງ ເຊິ່ງເຂົາເຈົ້າເອົາມາໃຫ້ຂ້າພະເຈົ້ານັ້ນແລ້ວ, ຂ້າພະເຈົ້າຈຶ່ງກັບຄືນສູ່ສະພາບປົກກະຕິຢ່າງສົມບູນ.

ຄົນຜູ້ໜຶ່ງທ່າທາງວ່ອງໄວ ນຸ່ງຊຸດລອຍນ້ຳລາຍກ່ານ ຖາມຂ້າພະເຈົ້າ:

- ເຈົ້າຊື່ແນວໃດ? ໂດດໄດ້ຄັກອີ່ຫລີ! ຄົນຜູ້ເຈົ້າຊ່ວຍຊີວິດໄວ້ນັ້ນ ເຂົາເຈົ້ານໍາກັບເຂົ້າໄປໃນເມືອງແລ້ວ. ເຈົ້າເປັນນັກໂດດອາຊີບຫລືສະຫມັກຫລິ້ນ?

ຂະນະດຽວກັນນັ້ນ, ຄົນຜູ້ຫນຶ່ງຕ່ຳໆແຕ່ໃຫຍ່ແລະຕຸ້ຍແຫກຝູງຊົນແລ່ນເຂົ້າມາ, ລາວເວົ້າຄືກັບຮ້ອງເອົາວ່າ:

- ລາວຢູ່ໃສແລ້ວ, ໃຫ້ຂ້ອຍເບິ່ງລາວແດ່.

ທຸກໆຄົນລ້ວນແຕ່ຖອຍອອກໄປດ້ວຍຄວາມເຄົາລົບນັບຖື ເພື່ອຈັ່ງຫວ່າງໃຫ້ຄົນໃຫຍ່ຕຸ້ຍຜູ້ນັ້ນ. ລາວຢຸດຢູ່ຕໍ່ຫນ້າຂອງຂ້າພະເຈົ້າ, ຍະແຂນອອກແລ້ວ ອັ້ງມືອັນອ່ອນນຸ່ມນັ້ນກໍຕົບບ່າຂ້າພະເຈົ້າຄ່ອຍໆ:

- ຍ້ອນເຈົ້າ, ເຂົາເຈົ້າຈະລົງພະນັນກັນຮ້ອຍກີບຫນຶ່ງ. ຕົກລົງບໍ່...

ຄົນນຸ່ງຊຸດລອຍນ້ຳລາຍກ່ານນັ້ນກົ່ງວຽງວຽນໆຢູ່ກັບຂ້າພະເຈົ້າ.

- ຂ້ອຍຂໍສຳພາດຫຍໍ້ໆດອກ. ເພື່ອຈະຂຽນລົງໃນວາລະສານກິລາ. ເຈົ້າຮຽນໂດດມາຈາກໃສ?

ແຕ່ຄົນໃຫຍ່ຕຸ້ຍຜູ້ນັ້ນພຽງແຕ່ໃຊ້ນິ້ວກ້ອຍເບື້ອງຊ້າຍເຂ່ຍໆເທົ່ານັ້ນ ນັກຂຽນຜູ້ນັ້ນກໍຕ້ອງຖອຍອອກໄປທັນທີ.

- ບັນດາທ່ານ, ພວກທ່ານຈະຕ້ອງປ່ອຍໃຫ້ຊຸນພົນກິລາຫນຸ່ມຂອງພວກເຮົານຸ່ງເຄື່ອງນຸ່ງຂອງກ່ອນຕິ. ເອ, ເອົາເຄື່ອງນຸ່ງມາໄດ້ແລ້ວບໍ່ລະ?

ເດັກນ້ອຍຫນັງດຳສອງຄົນເອົາເຄື່ອງນຸ່ງມາໃຫ້ຂ້າພະເຈົ້າ, ຈັກວ່າພວກມັນລັກປີນຂຶ້ນເທິງຮ້ານໂດດແຕ່ຫວ່າງເທິງ. ຂ້າພະເຈົ້ານຸ່ງເຄື່ອງ. ພວກເດັກນ້ອຍງົມຊອກຫາຫລຽນເງິນທີ່ເຂົາເຈົ້າຫວ່ານໄປໃຫ້ພວກມັນຢູ່ເທິງດອນຊາຍ!

ຄົນໃຫຍ່ຕຸ້ຍແນມເບິ່ງຂ້າພະເຈົ້າ.

- ເຈົ້າເປັນຂອງຂ້ອຍແລ້ວ!

- ຂໍໂທດທ່ານ, ຂ້າພະເຈົ້າບໍ່ເຂົ້າໃຈ... - ທັງເວົ້າ, ຂ້າພະເຈົ້າທັງສົນໃຈຊອກຫາຫມວກແງບຂາດຫົວນັ້ນ.

- ຊິເຂົ້າໃຈໄປເຮັດຫຍັງລະ? ເຈົ້າເປັນຂອງຂ້ອຍ... ໄປເທາະເຮົາ.

ລາວມີແບບໂອ້ລົມທີ່ຫນ້າງຶດງໍ້ທີ່ສຸດ. ຂ້າພະເຈົ້າໄດ້ເຮັດຕາມລາວບອກຢ່າງບໍ່ຮູ້ສຶກໂຕ, ສະນັ້ນຈຶ່ງກ້າວຕາມລາວໄປເຖິງຫາດຊາຍ, ຄົນທັງປວງກໍຫລຸຫລັ່ງຕາມມາ. ຢູ່ໂລກໃຫມ່ນີ້ ພວກຜູ້ໃຫຍ່ຍັງສະຫລອກກອກກ່ວາເດັກນ້ອຍ ຢູ່ ແອຊູໂອເຣີຂອງພວກຂ້າພະເຈົ້າຊໍ້າອີກ. ໂດຍບໍ່ສົນໃຈຫຍັງກັບພວກຄົນທີ່ຫຸ້ມກັນຢູ່ອ້ອມນັ້ນ, ລາວເວົ້າກັບຂ້າພະເຈົ້າຢ່າງອ່ອນຫວານ ແຕ່ເດັດຂາດ:

- ຂ້ອຍບໍ່ປ່ອຍເຈົ້າໃຫ້ໃຜຫມົດ. ທຸລະກິດອັນສະຫງ່າລາສີພວມລໍຖ້າເຈົ້າຢູ່. ເຈົ້າຈະຖືກໂອບດ້ວຍຄໍາ. ດີລັງກາຕັ້ງສີ່ຮອບ..., ພິລຶກອີ່ຫລີ! ຖ້າເປັນຜູ້ອື່ນໆຄືຊິຍ້ານຈົນຕົບລີບໄປ!

ລົດຍົນຄັນຫນຶ່ງເຫລື້ອມພິງໆຈອດຢູ່ເທິງກະຫນົບແຄມຝັ່ງທະເລ. ຜູ້ຂັບຂີ່ໄຂປະຕູອອກມາດ້ວຍຄວາມຄາລະວະ.

- ຂໍເຊີນ, - ອີ່ຕາຕູ້ຍເວົ້າຢ່າງນຸ່ມນວນ ແລະໃຫ້ໂອກາດຂ້າພະເຈົ້າຂຶ້ນລົດກ່ອນ.

ຖ້າຈະຂຶ້ນໄປນັ່ງຢູ່ໃນລົດຍົນຄັນນີ້ ກໍບໍ່ເຫັນວ່າຊິມີຫຍັງເປັນການສ່ຽງໄພ, ອີກຢ່າງຫນຶ່ງ ຂ້າພະເຈົ້າ ກໍບໍ່ຮູ້ບ່ອນທີ່ຈະໄປອີກ. ເມື່ອລົດໄດ້ອອກຈາກທ່າອາບນໍ້າແລະສຽງໂຮ່ຮ້ອງຂອງ ຜູ້ທີ່ຕິດຕາມມາສົ່ງນັ້ນງຽບລົງໄປແດ່ແລ້ວ ຂ້າພະເຈົ້າຈຶ່ງຄຶດສະເດືອກເຖິງ ຫມໍຕູ້ຍຜູ້ມີສາຍຕາ ຫລອກແຫລກນັ້ນ ຍັງບໍ່ໄດ້ຈ່າຍເງິນຫນຶ່ງດອນລາຍ້ອນເສຍການພະນັນໃຫ້ຂ້າພະເຈົ້າເລີຍ. ຍັງບໍ່ເຄີຍມີຈັກເທື່ອທີ່ຂ້າພະເຈົ້າຈະໂມໂຫປານຄັ້ງນີ້.

- ຮື, ເຮົາຈະຕ້ອງເອົາດອນລານັ້ນຄືນມາໃຫ້ໄດ້, - ຂ້າພະເຈົ້າທັງພຶມພໍາທັງຄຶດຢ່າງເມົາມົວ.

ຄົນໃຫຍ່ຕູ້ຍຜູ້ນັ້ນຫົວ:

- ໃນທີ່ສຸດ ຂ້ອຍກໍໄດ້ຍິນຄວາມເວົ້າອັນສຸດຈະລຶດຂອງເຈົ້າ. ບໍ່ອາດທີ່ຈະບໍ່ທວງຫນີ້, ເຖິງແມ່ນພຽງແຕ່ຫນຶ່ງດອນລາກໍຕາມ. ແຕ່ເມື່ອເຊັນສັນຍານໍາກັນແລ້ວ ເຈົ້າຈະມີຕັ້ງຫລາຍພັນດອນລາພຸ້ນໃດ...

ຂ້າພະເຈົ້າງວາກມາຫາລາວ:

- ທ່ານມີແຕ່ໃຫ້ຄຳໝັ້ນສັນຍາເປັນເງິນເປັນຄຳຕໍ່ຂ້າພະເຈົ້າ ທ່ານເປັນໃຜ? ຄົນຫລືຜີ? ລາວຍິ່ງຫົວດັງກ່ວາເກົ່າ.

- ບໍ່, ຂ້ອຍເປັນນັກຕະລົກຜູ້ໜຶ່ງ. ໃຜໆກໍ່ຮູ້ຈັກຊື່ຂອງຂ້ອຍດີ. ຂ້ອຍຄື ກລິບ.

## III

ກລິບ, ຜູ້ປະດິດລາຍການກາຍຍະສິນທີ່ສັບສົນແລະຫຍຸ້ງຍາກ ທັງເປັນນັກສິນລະປິນຕະລົກຜູ້ປີຊາສາມາດທີ່ສຸດນັ້ນສະເໜີໃຫ້ຂ້າພະເຈົ້າເຮັດວຽກນຳລາວໃນໂຮງກາຍຍະສິນ "ໂກໂລເຊອຸມ". ຢູ່ໃນຮ້ານອາຫານນ້ອຍ "ຫນູນ້ອຍມັກມ່ວນ", ບ່ອນທີ່ພວກເຮົາຫາກໍ່ໄປເຖິງນັ້ນ, ກລິບ ລ້ຽງຂ້າພະເຈົ້າດ້ວຍອາຫານຮອງທ້ອງທີ່ທຳທະດາສາມັນຄາບໜຶ່ງ ແລະປະຈຸບັນນີ້ ລາວພວມສົນລະວົນຢູ່ກັບການປຸງແຕ່ງນ້ຳດື່ມຊະນິດໃດໜຶ່ງເຊິ່ງມີສ່ວນປະສົມທີ່ສັບສົນທີ່ສຸດ. ພວກເສີບອາຫານເອົາແກ້ວສອງສາມອັນມາວາງໄວ້ຕໍ່ໜ້າລາວ, ແລ້ວລາວກໍ່ເຫຍັ້ນເອົາຈາກແຕ່ລະແກ້ວເຕັມຈອກນ້ອຍໜຶ່ງ ແລ້ວປົນສິ່ງທັງໝົດເຫລົ່ານັ້ນລົງໃນຈອກໃຫຍ່ໜ່ວຍໜຶ່ງ, ໃຊ້ບ່ວງເງິນອັນໜຶ່ງຄົນໆມັນເຂົ້າກັນ, ແລ້ວເປັນອັນວ່າ ລາວທັງດື່ມນ້ຳຕາພິເຜດນັ້ນ, ທັງຫຍ້ຳເຂົ້າຈີ່ກອນມົນໆທີ່ແຫ້ງແຂງກືກນັ້ນນຳ.

ຂ້າພະເຈົ້າໄດ້ຫລີກຈາກການໃຊ້ເຄື່ອງລ້າງປາກຊະນິດນີ້ຢ່າງລະມັດລະວັງແລະເອົາໃຈໃສ່ຕິດຕາມຟັງວ່າລາວເວົ້າຫຍັງແດ່, ຂ້າພະເຈົ້າ ບໍ່ເຂົ້າໃຈວ່າຍ້ອນຫຍັງຄົນຂີ້ໂກກແລະຂີ້ເຫລົ້າຈົນອອກໜ້າອອກຕາຜູ້ນີ້ຈຶ່ງມີເມດຕາຈິດສົນໃຈຂ້າພະເຈົ້າ. ລາວໂບກມືປະຕິເສດເມື່ອຂ້າພະເຈົ້າເຕືອງເກືງວິທະຍາໄລແລະໃບປະກາດສະນິຍະບັດຈົບຊັ້ນຂຶ້ນມາ.

- ເລື່ອງແບບນີ້ບໍ່ມີໃຜງືດແລ້ວແຫລະ. ກະທັ່ງຊື່ຂອງເຈົ້າຂ້ອຍກໍ່ບໍ່ຕ້ອງການຈະຖາມ. ຂ້ອຍບໍ່ຕ້ອງການເກືງຂະແໜງຈິດຕະສາດຂອງເຈົ້າ. ຂ້ອຍແນມເຫັນແຕ່ບັນຫາດຽວ: ເວທີສະແດງຕ້ອງການສະເພາະແຕ່ກ້າມຊີ້ນຂອງເຈົ້າເທົ່ານັ້ນ.

ດື່ມໝົດຈອກທີ່ສອງ ລາວກໍ່ຫັນມາເວົ້າດ້ວຍນ້ຳສຽງສະຫນິດສະຫນົມໄດ້ຢ່າງຄ່ອງແຄ້ວ.

- ເຈົ້າຈະກາຍເປັນນັກສືບລະບືບຜູ້ຫນຶ່ງຢ່າງຫນຶ່ງບໍ່ມີສອງ, -ກລິບຕໍາຫນາກຍໍໃຫ້ຂ້າພະເຈົ້າຢ່າງເປີດແປນ. - ນີ້ເພື່ອນ, ພວກເຮົາຈະຕ້ອງເປັນເສດຖີ. ອີກເດືອນດຽວເທົ່ານັ້ນ, ເຮົາແລະເຈົ້າຫາລະເອົາລ້ານໂສກເອົາຄໍາ, ຖ້າບໍ່ເປັນເຊັ່ນນັ້ນແລ້ວ ເຮົາກໍບໍ່ແມ່ນ ກລິບອີກແລ້ວ ...

ນອກຈາກອະລໍາພະບົດນັ້ນແລ້ວ ກລິບ ກໍໄດ້ເພີຍໃຫ້ຂ້າພະເຈົ້າຮູ້ກ່ຽວກັບຈິນຕະນາການຂອງລາວຢ່າງແຈ່ມຈັດ. ດົນນານມາແລ້ວ ທີ່ລາວໄດ້ຄິດລາຍການທີ່ສ່ຽງຕໍ່ຊີວິດຢ່າງຫນຶ່ງຂຶ້ນມາທີ່ມີຊື່ກະດຸກເສັ້ນຄື"ຄົນເບົາກ່ວາອາກາດ", ແຕ່ລາວບໍ່ສາມາດຫາຄົນມາສວມບົດເປັນຕົວເອກໃນລາຍການນີ້ໄດ້.

- ບໍ່ວ່າຕີແມ້ແຕ່ແບລັກສະເນັກກໍປະຕິເສດບໍ່ຢາກຊິດຊ່ວຍທ່ານ? - ຂ້າພະເຈົ້າຖາມກິບ.

ຍັງອີກຫນ້ອຍດຽວທີ່ລາວຈະສະຫມັກຍ້ອນອິມເຫລົ້າປະສົມປຸກງນັ້ນ.

- ໃຜ?

- ຜູ້ຂຶ້ນຊື່ລືນາມໃນການຕີລັງກາປິ້ນຕົວໄດ້ຫັ້ນນ່າ - ຍ້ອນລາວ ເຂົາເຈົ້າຈຶ່ງສ້າງຮ້ານໂດດທີ່ຂ້ອຍຫາກໍໂດດມາສິດໆຮ້ອນໆນັ້ນ.

- ເພື່ອນນ້ອຍຂອງຂ້ອຍເອີຍ, ເຈົ້າຄິດຜິດໄປແລ້ວ, - ກລິບ ຕອບ. - ພວກເຮົາບໍ່ມີນັກກິລາຄົນໃດທີ່ໃສ່ນາມສະກຸນງແບບນັ້ນ. ສ່ວນຮ້ານໂດດນັ້ນ ແມ່ນສະມາຄົມກິລາ ແບັນຮັກບໍ ເປັນຜູ້ສ້າງຂຶ້ນ. ແຕ່ເອົາລະ, ຢ່າຊິຕົດບົດຂ້ອຍໄປຍ້ອນເລື່ອງບໍ່ເປັນສາເຫດກ່ຽວກັບອີຕາ ສະເນັກ ໂລເລ ຄົນໃດຄົນຫນຶ່ງນັ້ນເທາະ.

- ຂໍໂທດທ່ານ, - ຂ້າພະເຈົ້າພຶມພໍາ, ໃນໃຈຍັງຫວັງຢາກຈະພົບຫນ້າຫມໍຕູ້ຍຫມູຕອນທີ່ມີສາຍຕາຫລອກແຫລກນັ້ນອີກເພື່ອຈະຄິດບັນຊີກັບມັນໃຫ້ແລ້ວສາ. ຍິ່ງກ່ວານັ້ນ ເຂົາຍັງບໍ່ທັນໄດ້ໃຊ້ຫນີ້ຍ້ອນເສຍການພະນັນໃຫ້ຂາພະເຈົ້າແກຸມຍັງຫົວເຍີ້ຍອີກ.

ຕາມຂ້າພະເຈົ້າເຂົ້າໃຈແລ້ວ, ເນື້ອໃນລາຍການກລິບ ແມ່ນສະແດງການຕີລັງກາປິ້ນຕົວຂ້າມເວທີສະແດງຂອງໂຮງກາຍຍະສິນ "ໂກໂລເຊອູມ". ແຕ່ຈົນຮອດມື້ລຸນມາພໍ້, ເມື່ອຂ້າພະເຈົ້າແນມເຫັນເຄື່ອງຈັກກິລາພິດສະດານຢູ່ບ່ອນຂອງທ່ານຜູ້ອໍານວຍການໂຮງກາຍຍະສິນ

ດ້ວຍຕາຂອງຕົນເອງ ຂ້າພະເຈົ້າຈື່ງຮູ້ຢ່າງແຈ່ມແຈ້ງເຖິງທຸກການຄິດໄລ່ຂອງລາຍການ. ເຄື່ອງຈັກນັ້ນທຳໃຫ້ຂ້າພະເຈົ້າຕ້ອງແປກໃຈ, ແລະຂ້າພະເຈົ້າກໍພ້ອມທີ່ຈະສວມບົດສະແດງ "ຄົນເບົາກ່ວາອາກາດ" ນັ້ນ.

ແຕ່ແລ້ວ, ການທີ່ຂ້າພະເຈົ້າເຫັນດີສວມບົດສະແດງນັ້ນ ໃສຊີແມ່ນຍ້ອນຄວາມງຶດງ້ອັດສະຈັນຕໍ່ເຄື່ອງຈັກທີ່ມີວິທະຍາການອັນສົມບູນຂອງກລົບ, ແລະຕົ້ນຕໍກໍແມ່ນຍ້ອນຄຳເວົ້າຂອງນັກຕະລົກທີ່ເວົ້າອອກມາ ໃນຂະນະທີ່ພວກເຮົາສົນທະນາກັນຢ່າງລະອຽດຢູ່ທີ່ຮ້ານອາຫານນ້ອຍແຫ່ງຫນຶ່ງໃນຄຸ້ມ ເບີ ໑໗:

- ໃຜຊິບໍ່ຢາກກິນເຂົ້າຈີ່ກັບເບີ, ແທນທີ່ຈະກິນແຕ່ເຂົ້າຈີ່ລ້າງ.

ດ້ວຍຄວາມເຫັນ ດີ ຂອງຫມໍດຄະນະກາຍຍະສິນ ແລະພາຍໃຕ້ການຊີ້ນຳຂອງກລົບ. ຕະຫລອດສາມອາທິດລຽນຕິດກັນ, ຂ້າພະເຈົ້າໄດ້ເຝິກຊ້ອມລາຍການອະພິນິຫານເຊິ່ງແມ່ນນັກຕະລົກ, ນັກປະດິດຄິດແຕ່ງ, ປະດິດຂຶ້ນມານັ້ນ. ເຂົາເຈົ້າໃຫ້ຂ້າພະເຈົ້າກິນດື່ມຢ່າງບໍ່ມີບ່ອນຈະຕິໄດ້. ເຖິງແມ່ນວ່າຈະໄດ້ທຳການເຝິກຊ້ອມຢ່າງຂຸ້ນຂ້ຽວແຕ່ໃນໄລຍະເວລາດັ່ງກ່າວຂ້າພະເຈົ້າກໍຍັງໄດ້ພັກຜ່ອນ ແລະນ້ຳຫນັກກໍເພີ່ມຂຶ້ນ. ພາຍຫລັງທີ່ໄດ້ຕົກລົງໃຈປົງຕົກທຸກສິ່ງໄວ້ກັບໂຊກຊາຕາແລ້ວ, ຂ້າພະເຈົ້າປະກົດວ່າບໍ່ໄດ້ຄຶດເຄືອງຫຍັງເຖິງວາລະສະແດງທີ່ໃກ້ຈະມາເຖິງນັ້ນເລີຍ.

ໃນທີ່ສຸດວັນສະແດງຄັ້ງທຳອິດນັ້ນກໍມາເຖິງ. ຢູ່ຫລັງເວທີສະແດງນັ້ນ ເຂົາເຈົ້ານຸ່ງຊຸດສີເຫລືອງມີແຊກໄຫມຄຳເຫລື້ອມຍິບຍັບໃຫ້ແກ່ຂ້າພະເຈົ້າ, ຫລັງຈາກນັ້ນຂ້າພະເຈົ້າກໍຖືກນຳຕົວຂຶ້ນສູ່ເວທີໃນຈັງຫວະເສບຂອງເພງ "ຈັງຫວະກ້າວເດີນຂອງນັກຟັນດາບ". ກລົບ ທັງຕະລົກເຮຣາທັງສະເຫນີລາຍການສະແດງຢ່າງຊຳນິຊຳນານພາໃຫ້ພວກນັ່ງຢູ່ຊັ້ນລາຄາຖືກສຸດນັ້ນຫົວແຕກໂຄບຂຶ້ນ. ຂ້າພະເຈົ້າກົ້ມຫົວເຄົາລົບຜູ້ຊົມທັງຫລາຍຢ່າງສຸພາບທີ່ສຸດ, ກລົບ ວາງຕົວຂ້າພະເຈົ້າລົງໃນອູ່ທີ່ໄດ້ຮັບການປະດັບປະດາຢ່າງງົດງາມນັ້ນແລ້ວຊິມ:

- ນີ ເຊນຸຍແອນ, ຈົ່ງທຸ່ນທ່ຽງເດີ. ຢ່າໄປສົນໃຈຫຍັງນຳຄົນສະຫລອກກອກພວກນັ້ນ. ຈົ່ງຄຶດເອົາວ່າ ນີ້ແມ່ນການສະແດງທົດລອງຊື່ໆ.

ດົນຕີບ່ຽນເປັນຈັງຫວະ ວານເສີ ທີ່ໂສກເສົ້າ "ນອນສາເຍີ ແມວນ້ອຍຂອງແມ່..."

ນອນຢູ່ໃນອູ່, ຂ້າພະເຈົ້າພະຍາຍາມຮັກສາທ່າທີເຢືອກເຢັນເມີນເສີຍ. ແຕ່ບັນດາຄວາມຄຶດອັນມືດມົນປະກົດວ່າແກ້ງເລັດລອດເຂົ້າມາໃນມັນສະຫມອງຂອງຂ້າພະເຈົ້າ. ຈັກຈັ່ງໃດບໍ ຂ້າພະເຈົ້າຈຶ່ງມາຄຶດວ່າຄວນຈະຂຽນຈົດຫມາຍໄປໃຫ້ ເອດີ, ກ້າ... ກ້າວ່າມື້ນີ້ທຸກສິ່ງທຸກຢ່າງເປັນໄປໂດຍດີ. ບະ, ກ້າລອດຕາຍໃນຄັ້ງນີ້ແລ້ວ!... ຈັ່ງໃດເຮົາຈຶ່ງໄປຕິດພັນກັບອີຕາເກົ້າກລີບນັ້ນ? ບາງເທື່ອຂ້າພະເຈົ້າຢາກຈະໂດດອອກຈາກອູ່ແລ້ວປົບຫນີໄປ. ແຕ່ສວາຍສາແລ້ວ.

ຂະນະນັ້ນ ກລີບວຽນອ້ອມອູ່ຕະຫລອດເວລາ, ທັງດິດທັງເຕັ້ນ ເບິ່ງແລ້ວເປັນຕາຢາກຫົວ, ປານກັບວ່າລາວບໍ່ມີກະດູກເອິກໂລດ. ລາວດີດພິນ ບັງໂຢ ປະສານກັບວົງດົນຕີແລະອຶດເພງຢູ່ຢ່າງອິ່ນອ້ອຍດ້ວຍສຽງຕົນດັ່ງ:

ນອນສາເຍີ ແມວນ້ອຍຂອງແມ່
ແລະຫົວຍິ້ມສົດຊື່ນໃນຝັນ
ເພື່ອວັນລຸນແສງທອງເລີ່ມສ່ອງ
ລຸກຕື່ນຂຶ້ນຫາຍເສົ້າຫມົ່ນຫມອງ...

ສຽງດົນຕີຢຸດຢູ່ໃນຈັງຫວະທີ່ເສົ້າເຫງົາ. ພວກນັກດົນຕີເສັບ ວີໂອລົງ ອານໂຢປິດອາກເຊ ລົງໄປແລະແກະພາກສ່ວນຜ່ອນສຽງອອກຈາກສາຍພິນ. ພວກນັກດົນຕີເປົ່າແກກໍໄດ້ໂອກາດພັກຫັນໃຈ. ສ່ວນພວກໃຊ້ກອງແລະແສ່ງທອງນັ້ນ ກໍຕີລັ່ນຄຶ້ມຄຶ້ມຂຶ້ນພາໃຫ້ຫມົດໂຮງ "ໂກໂລເຊອູມ" ຫູອື້ງໄປ. ກລີບ ເຮັດຕາຫົບແນມເບິ່ງຂ້າພະເຈົ້າແລ້ວເລີກຄິ້ວທີ່ກົກແດ່ງແຕ້ມຕື່ມເບື້ອງຊ້າຍນັ້ນຂຶ້ນສູງ ໂດຍມີຄວາມຫມາຍບອກມາວ່າ: "ລະວັງແລະເອົາໃຈໃສ່".

ກ້າຄຶດຂຶ້ນໄດ້ວ່າອູ່ທີ່ຂ້າພະເຈົ້ານອນຢູ່ນັ້ນ, ໃນຕົວຈິງແລ້ວມັນ ກໍຄື ບ່ວງຍັກອັນຫນຶ່ງທີ່ຕິດຢູ່ກັບເຄື່ອງຈັກສິ່ງຂະຫນາດແຮງນັ້ນແລ້ວ, ທ່ານຜູ້ອ່ານກໍຈະເຂົ້າໃຈເກືອງສິ່ງທີ່ຄຶງຄ້າງຢູ່ນັ້ນໄດ້ງ່າຍດາຍກ່ວາ.

ຂ້າພະເຈົ້າສູບລົມຫັນໃຈບາດຍາວໆແລະຮັບການແນມເບິ່ງຂອງ ກລີບ ເຫມືອນຈະເວົ້າວ່າ: "ກຽມພ້ອມແລ້ວ".

ກລິບ ໂຍນພິນ ບັງໂຢກິ້ມແລະຍິງປືນສັ້ນຂຶ້ນຟ້ານັດຫນຶ່ງເພື່ອເປັນປະກາສິດໃຫ້ແກ່ພວກຮັບຜິດຊອບຈັກສິ່ງທີ່ຢູ່ເບື້ອງຫລັງເວທີສະແດງ. ສຽງດົນຕີດັງລັ່ນຂຶ້ນຈົນຫູດັບຕັບໄຫມ້, ກຳແພງສີ່ດ້ານຄືກັບຈະເຈື່ອນລົງ. ລໍ້ຊໍຂອງຈັກສິ່ງດີດຫນັກແຮງເປັນອັນວ່າຂ້າພະເຈົ້າບິນຫວູດຂຶ້ນຈົນຈຳຈອມສຸດຂອງໂຮງສະແດງກາຍຍະສິນ. ບາງທີພວກຜູ້ຍິງປະສາດອ່ອນອາດຈະຮ້ອງກີກຂຶ້ນດ້ວຍຄວາມຫວາດສຽວແຕ່ຂ້າພະເຈົ້າບໍ່ໄດ້ຍິນຫຍັງເລີຍ.

ຂ້າພະເຈົ້າຫລົ່ນລົງມາທາງເບື້ອງລຸ່ມຕາມວົງໂຄຈອນດັ່ງ.

ກຳລັງແຮງຂອງລໍ້ຊໍຈັກສິ່ງໄດ້ຮັບການຄິດໄລ່ໃຫ້ເຫມາະສົມ ກັບນ້ຳຫນັກຂອງຂ້າພະເຈົ້າພ້ອມທັງເຄື່ອງນຸ່ງຂອງກູ, ມັນຈະປ່ອຍຂ້າພະເຈົ້າລົງສູ່ບ່ອນທີ່ໄດ້ຄາດຫມາຍເອົາໄວ້ຢູ່ເທິງເວທີສະແດງນັ້ນຢ່າງແມ່ນຍຳທີ່ສຸດ. ຢູ່ບ່ອນນັ້ນ ເຂົາເຈົ້າໄດ້ຕັ້ງກະຖັງຢາງໃສນ້ອຍໆກນ່ວຍຫນຶ່ງໄວ້ເຊິ່ງບັນຈຸແອອັດໄປດ້ວຍນ້ຳເປື້ອຍເກືອດ້ວຍລະດັບຊຸ່ມອັນແນ່ນອນ. ເມື່ອບິນສັກຫົວລົງເບື້ອງລຸ່ມນັ້ນ, ແນ່ນອນຕ້ອງໃຫ້ຂ້າພະເຈົ້າຕົກລົງໃສ່ກະຖັງດັ່ງກ່າວ. ເມື່ອກົວຊູບເອົາຫນ້ານ້ຳນັ້ນ, ຂ້າພະເຈົ້າຕ້ອງຕີລັງກາຢ່າງວ່ອງໄວເພື່ອເຮັດແນວໃດໃຫ້ເຫມືອນກັບພວມນັ່ງຢູ່ໃນກະຖັງນັ້ນທັນທີ. ເກມນີ້ມີລັກສະນະອະພິນິຫານຢູ່ບ່ອນວ່າການຕີລັງກາທີ່ວ່ອງໄວຂອງຂ້າພະເຈົ້ານັ້ນ ນ້ຳຈະຮອງຮັບເອົາກຳລັງແຮງທັງຫມົດທີ່ຕົກລົງມານັ້ນໄວ້. ໃນເວລາສະແດງທົດລອງຕ່າງໆ ຂ້າພະເຈົ້າລ້ວນແຕ່ປະຕິບັດພາລະກິດເຫລົ່ານັ້ນໄດ້ເປັນຢ່າງດີ.

ແລະຂະນະນີ້ຂ້າພະເຈົ້າພວມສະແດງລາຍການສ່ຽງຕໍ່ຄວາມຕາຍເປັນຄືຂອງຫລິ້ນນັ້ນ ຢູ່ຕໍ່ຫນ້າສາຍຕາຂອງຜູ້ຊົມ. ຮິມສົບຂອງຂ້າພະເຈົ້າຂົມຕັດໄປດ້ວຍນ້ຳເກືອ. ກລິບ ເດ່ມືອອກມາ, ຂ້າພະເຈົ້າຈັບເອົາມືຂອງລາວແລ້ວໂດດອອກຈາກກະຖັງລົງສູ່ບ່ອນທີ່ມີຂີ້ຊາຍປູໄວ້ນັ້ນ.

ບັນດາໂຄມໄຟເຍືອງຂະຫນາດໃຫຍ່ຄົບທຸກສີສັນນັ້ນ ລ້ວນແຕ່ຫັນມາຍັງຂ້າພະເຈົ້າ. ຜູ້ຊົມຫວາງຫາດຮ້ອງໂຮຂຶ້ນອຶກກະທຶກຈົນກ້ວມທັງສຽງດົນຕີທີ່ພວມດັງກຶກກ້ອງຢູ່ນັ້ນ.

- ກົ້ມຫົວຄຳນັບສາດີ, ບັກເຜດ!- ກລິບບີບມືຂອງຂ້າພະເຈົ້າຫນັກແຮງ, ທັງແຜດສຽງຂຶ້ນ. ແຕ່ຂ້າພະເຈົ້າມີແຕ່ຢາກມຸດດິນຫນີເທົ່ານັ້ນ.

ໃນຫ້ອງກ່າຍເຄື່ອງນັ້ນ ເຂົາເຈົ້າຄຸມແພຕຸ້ມຜ້າຍໃຫຍ່ຜືນຫນຶ່ງໃສ່ຕົວຂອງຂ້າພະເຈົ້າ,

ແລ້ວຫມໍນວດກໍເລີ່ມບີບໆຄັ້ນໆຮ່າງກາຍທີ່ເມື່ອຍເພຍ ຍ້ອນເສັ້ນປະສາດເຄັ່ງຕຶງຂອງຂ້າພະເຈົ້າ.

- ໃຜກໍງຶດຕາຍໄປ! - ທ່ານຜູ້ອຳນວຍການທັງແລ່ນພວດພາດເຂົ້າມາໃນຫ້ອງກ່າຍເຄື່ອງນຸ່ງທັງເວົ້າ. - ມື້ອື່ນຫນັງສືພິມຈະລົງພິມບົດກະຕຸກເສັ້ນໃຫ້ເບິ່ງ! ຮູ້ບໍ່ວ່າມີເລື່ອງຫຍັງເກີດຂຶ້ນຢູ່ໃນໂຮງສະແດງແດ່! ສາມສິບຫົກຄົນເສຍເສັ້ນ. ເຈັດຮ້ອຍຄົນຄໍແຫບໄປຍ້ອນຮ້ອງຊື່ຂອງເຈົ້າ! ຂ້ອຍຂໍເຊັນສັນຍາກັບເຈົ້າ! ໂດດແຕ່ລະເທື່ອຈ່າຍໃຫ້ພັນຫນຶ່ງ! ໄປຮອບໂລກເບິ່ງຈັກບາດ...

- ຂໍຈົ່ງປ່ອຍໃຫ້ບັກນ້ອຍຟື້ນສະຕິຄືນມາກ່ອນ, ກລິບ ວົ້ງວອນນຳທ່ານຜູ້ອຳນວຍການ ແລະແນມເບິ່ງຂ້າພະເຈົ້າຢ່າງປ່ຽມລົ້ນໄປດ້ວຍຄວາມງຶດງໍ້ອັດສະຈັນ.

"ຄົນພວກນີ້ຈະລ້າງຜານຊີວິດເຮົາ, - ຂ້າພະເຈົ້າຄິດແບບນັ້ນ, ໃນໃຈຂົມຂື່ນແລະສັ່ນຂຶ້ນທັງຄີງດ້ວຍຄວາມຢ້ານກົວ. - ບໍ່ມື້ໃດກໍມື້ຫນຶ່ງ ຂ້າພະເຈົ້າຕ້ອງຄໍຫັກໃຫ້ໄດ້. ຄວາມຈິງແລ້ວ ທຸກໆຄັ້ງເຂົາເຈົ້າລ້ວນແຕ່ກວດກາລໍຊິຄືນໃຫມ່ ແລະຍິງສິ່ງກັງທີ່ບັນຈຸວັດຖຸຫງບເທົ່າກັບນ້ຳຫນັກຂອງຂ້າພະເຈົ້າຄືນໃຫມ່. ແຕ່... ບາດຫ່າມັນພາດໄປ... ແລ້ວຂ້າພະເຈົ້າກໍຈະບໍ່ໄດ້ກັບສູ່ ແອລູໂອເຣີ ເພື່ອເຫັນຫນ້າ ເອດີ ອີກແລ້ວ..."

ຄວາມຫວາດສຽວຢ່າງໄຮ້ສະຕິສຳນຶກທີ່ປົກຄຸມຕົວຂອງຂ້າພະເຈົ້າຢູ່ເທິງເວທີນັ້ນ, ຂະນະນີ້ໄດ້ ແຊກຄຸມວິນຍານຂອງຂ້າພະເຈົ້າໄວ້ຢ່າງສົມບູນ. ຈະຫນີໃຫ້ຫວີດເງື້ອມມືຂອງພວກຂີ້ຕົກມັກໄດ້ນີ້ໃສຊິແມ່ນເລື່ອງງ່າຍ. ແຕ່ກໍນັບວ່າໂຊກດີ, ບັງເອີນຂ້າພະເຈົ້າຄຶດສະເດືອກເກີງຫມໍທີ່ມັນເສຍການພະນັນໃຫ້ຂ້າພະເຈົ້າ, ແລະແບບແຜນສົນທະນາປາໄສຂອງມັນແລ້ວຂ້າພະເຈົ້າກໍຫລຸດປາກອອກມາ:

- ໃຈເຢັນໆ, ຍ້ອນຂ້າພະເຈົ້າພວກທ່ານຍັງຈະຄ້ວາກຳໄລມາໄດ້ຮ້ອຍເປີເຊັນພຸ້ນແຫລະ, ທ່ານຈ່າຍເງິນໃຫ້ຄ່າເຕັ້ນມື້ນີ້ສາ. ບໍ່, ບໍ່ແມ່ນເຊັກ ແຕ່ຕ້ອງເປັນເງິນສົດ.

ທ່ານຜູ້ອຳນວຍການໂຍນເງິນຂຶ້ນເທິງໂຕະນ້ອຍຫນ່ວຍຫນຶ່ງ.

ຂ້າພະເຈົ້າກໍບໍ່ຊາຊິແນມເບິ່ງເງິນຊໍ້າ.

- ຂະນະນີ້ຂໍທ່ານຈົ່ງໃຫ້ຂ້າພະເຈົ້າໄດ້ພັກຜ່ອນກ່ອນ, - ຂ້າພະເຈົ້າຮ້ອງຂໍດ້ວຍສຳນຽງອັນອ່ອນເພຍ.

ບັນດານັກຂຽນສາລະຄະດີແລະຊ່າງພາບຊຸກປະຕູຫລຸຫລັ່ງເຂົ້າມາ. ກລີບ ແລະທ່ານຜູ້ອຳນວຍການໂບກມືປະຕິເສດ.

- ຮຽນບັນດາທ່ານ, ນັກສະແດງເອກບໍ່ສາມາດຮັບຕ້ອນພວກທ່ານໄດ້.

ໃນຫ້ອງບໍ່ມີໃຜອີກແລ້ວ. ຂ້າພະເຈົ້າຟ້າວນຸ່ງເຄື່ອງ, ຂັນກະແຈປະຕູໄວ້, ຍັດເງິນເຂົ້າໄປໃນກົງແລ້ວແນມຜ່ານປ່ອງຢ້ຽມອອກໄປ. ທໍ່ນ້ຳເນັ່ງຊື່ລົງລຸ່ມຢູ່ຂ້າງງນັ້ນສາມາດເດ່ມືເກິງໄດ້.

ຂ້າພະເຈົ້າຂຽນຕົວຫນັງສືບັກໃຫຍ່ໃສ່ດ້ານຫລັງຂອງປ້າຍໂຄສະນາດ້ວຍສໍແຕ່ງຫນ້າ:

"ທ່ານ ກລີບທີ່ນັບຖື! ຂ້າພະເຈົ້າບໍ່ຢາກສ່ຽງຕາຍອີກແລ້ວ".

ຂ້າພະເຈົ້າຕິດປ້າຍຄຳຂວັນນັ້ນໃສ່ໃນແວ່ນເທິງໂຕະ ແລ້ວຄ່ອຍໆໄຂປະຕູປ່ອງຢ້ຽມອອກ. ນັບວ່າເປັນບຸນວາດສະຫນາຂອງຂ້າພະເຈົ້າ, ເດີ່ນເບື້ອງລຸ່ມບໍ່ມີຄົນຢູ່.

ຈິດໃຈຮູ້ສຶກສົດຊື່ນເພາະມີອິດສະຫລະ, ຂ້າພະເຈົ້າປີນຜ່ານຂອບປະຕູປ່ອງຢ້ຽມໄປ, ທັງຄົວາຈັບທໍ່ນ້ຳນັ້ນໄວ້ແຫນ້ນໆ.

## ຕອນທີສາມ

### I

ຂ້າພະເຈົ້າໄດ້ໄປເກີງຝັ່ງການກຸດຕາ. ເທິງຫົວຂອງຂ້າພະເຈົ້າຄືດວງອາທິດອິນເດຍທີ່ຮ້ອນເຈີດຈ້າ.

ໂຊກຊາຕາກົ້ມຂ້າພະເຈົ້າຂຶ້ນສູ່ຝັ່ງແຫ່ງນີ້ ພາຍຫລັງການຈັດເຊພະເນຈອນ ໃນການະຂອງນັກສະແດງລຸ້ນຕາຍໆຜູ້ຫນຶ່ງ.

ໄລຍະສຸດທ້າຍຂອງການທ່ຽວພະຈົນໄພເຫລົ່ານັ້ນ ແມ່ນທະວີບອາຟະລິກກາ, ຢູ່ທີ່ນັ້ນຂ້າພະເຈົ້າພ້ອມດ້ວຍເພື່ອນເຊິ່ງເປັນນັກທຸລະກິດນັກມ່ວນຜູ້ຫນຶ່ງ ໄດ້ພາກັນຍ່າງເລາະສະແດງໄປຕາມຄຸ້ມຕະຫລາດນັດຕ່າງໆຢູ່ໃນບໍລິເວນອ້ອມແອ້ມຕົວເມືອງເກັບເຕົາ. ເວລາທຳການສະ

ແດງ ຂ້າພະເຈົ້າຈຳຕ້ອງສວມບົດເປັນຄົນທີ່ເກີດພະຍາດຫລັບໃນ ແລະປ່ອຍໃຫ້ຄູ່ສະແດງຄົນນັ້ນໃຊ້ເຂັມກັກນ້ອຍແທງສອງພວງແກ້ມຂອງຂ້າພະເຈົ້າຈົນຊອດ, ລາວເຮັດໄດ້ຢ່າງຄ່ອງແຄ້ວຈົນສາມາດພິຊິດໃຈຜູ້ຊົມ. ໃນຂະນະດຽວກັນນັ້ນ ລາວກໍປະກາດຂຶ້ນວ່າ:

- ຮຽນທ່ານຍິງແລະທ່ານຊາຍທັງຫລາຍ! ຕໍ່ຫນ້າຂອງພວກທ່ານຄື ເປມຊິນ ຜູ້ຂຶ້ນຊື່ລືນາມໄປທົ່ວໂລກ, ເຂົາຜູ້ນີ້ພວມຢູ່ໃນອາການສະຫງົບຈິດຢ່າງສົມບູນ.

ໃນເວລາດັ່ງກ່າວນັ້ນ ຂ້າພະເຈົ້າຈະຫລັບຕາຢູ່ແຕ່ບໍ່ສາມາດເຊືອບຫລັບໄປໄດ້. ຂ້າພະເຈົ້າຮູ້ສຶກອັບອາຍເມື່ອຈຳຕ້ອງເຮັດໃນສິ່ງທີ່ໄຮ້ສາລະນັ້ນ ແລະຄິດຫາວຽກເຮັດງານທຳຢ່າງອື່ນທີ່ເຫມາະສົມກວ່າຂ້າພະເຈົ້າໄດ້ຕົກເຂົ້າໃນວົງໂຄຈອນຂອງກົງລໍ້ອຸບາດຢ່າງຫນຶ່ງ ແລະເປັນທີ່ແຈ່ມຊັດວ່າມັນພວມເກາະກັງວົນຫນ່ວງຕົວຂອງຂ້າພະເຈົ້າລົງສູ່ເຫວເລິກ. ແຕ່ກໍນັບວ່າໂຊກດີທີ່ຍັງມີຄົນທັນຕັກເຕືອນຂ້າພະເຈົ້າຢ່າງມີເຫດມີຜົນ.

ໃນສະຖານທີ່ວາງສະແດງສັດປ່າຂອງຕະຫລາດນັດນັ້ນ, ມີຄົນຜູ້ຫນຶ່ງຈ່ອຍສູງເຕວເວວ, ລາວມີອາຊີບເຝິກແອບສັດຮ້າຍ ແລະມີຊື່ຢູ່ຕາມປ້າຍໂຄສະນາວ່າ: "ລາຊາຫມາໄນ" ລາວມີໃບຫນ້າທີ່ຫ້ຽມໂຫດ ແລະມັກສະແດງບົດອະພິນິຫານຕ່າງໆອັນພາໃຫ້ຜູ້ຊົມຕ້ອງສຽວສະຫຍອງ. ລາວສາມາດກືນດາບທັງດວງລົງທ້ອງ, ອົມນ້ຳມັນເຊື້ອເພີງ, ຈູດແລະພົ່ນໄຟຕວາດໆອອກມາເປັນແປວ ສູງຕັ້ງສອງຟຸດ. ລາວຍັງກ້າປ້ຳກັບຫມີດຳຫິມະໄລຢ່າງຕົວຕໍ່ຕົວອີກ. ແຕ່ເມື່ອຢູ່ຫລັງສາກຊ້ຳພັດເປັນຄົນສະຫງ່ຽມຈຽມຕົວ, ມີດວງບຢ່າງຫາຍາກຜູ້ຫນຶ່ງ. ແມ່ນລາວເອງທີ່ໄດ້ຊຸກຍູ້ໃຫ້ຂ້າພະເຈົ້າຕົກລົງໃຈໄປ ອິນເດຍ.

- ເຊມຸຍແອນ ເອີຍ, ໄປຫາກິນຢູ່ທາງນັ້ນດີກວ່າ. ສ່ວນເຮົານີ້ມັນລົງກັບຊາວ ບູໂລແລະພວກອາພະລິກກາຊອດນີ້ແລ້ວ. ເຮົາຈະຂໍຕາຍຢູ່ດິນດອນນີ້ລະ. ເຈົ້າມີປະກາດສະນີຍະບັດ, ຊີວິດພວມໄຂຊ່ອງທາງຢູ່ຕໍ່ຫນ້າຂອງເຈົ້າ. ມີແຕ່ຢູ່ທາງພຸ້ນເທົ່ານັ້ນ ໃບປະກາດສະນີຍະບັດຂອງເຈົ້າຈຶ່ງຊິມີຄຸນປະໂຫຍດ, ແຕ່ບໍ່ແມ່ນຢູ່ນີ້, ຢູ່ບ່ອນຟ້າສຸດດິນຕໍ່ນີ້.

"ລາຊາຫມາໄນ" ໄດ້ແນະນຳຂ້າພະເຈົ້າຕໍ່ຜູ້ຕາງຫນ້າບໍລິສັດສິ່ງລົງ ມາດາກາດສະກາ ໃຫ້ແກ່ສວນສັດຕ່າງໆ. ຈາກນັ້ນ ຂ້າພະເຈົ້າກໍໄດ້ເດີນທາງໄປກັບລາວ ຕັ້ງແຕ່ທາງພາກໃຕ້ ອາພະລິກກາຈົນຮອດພາກເຫນືອ ນອນຢູ່ໃນຫ້ອງນ້ອຍໆຂອງກຳປັ່ນເດີນທະເລນັ້ນ, ຜູ້ຕາງ

ຫນ້າທີ່ໄປນຳກັນກັບຂ້າພະເຈົ້ານັ້ນ ນອນຫລັບປານຕາຍແລະໂກນດັງເກີງຂັ້ນວ່າຜູ້ຊ່ວຍງານຂອງທ່ານກັບຕັນເຮືອຕ້ອງແວ່ເຂົ້າມາສ່ອງເບິ່ງຫ້ອງພວກເຮົາແລະເວົ້າວ່າ:

- ເບິ່ງຄືຈັ່ງວ່າເຈົ້າ ເອົາໂຕຊ້າງນ້ຳມານຳຫວະ?

ພໍໄປເຖິງເກາະ ໂມຣິກີ ຂ້າພະເຈົ້າກໍອຳລາຈາກເພື່ອນຮ່ວມທາງ. ລາວຂຶ້ນກຳປັ່ນລຳໃຫມ່ເພື່ອຈະເດີນທາງອີກສອງມື້ໄປຍັງ ຕາມາຕາບ, ເຊິ່ງເປັນທ່າກຳປັ່ນແຫ່ງຫນຶ່ງຢູ່ທາງທິດບູລະພາຂອງ ມາດາກາດສະກາ.

ກຳປັ່ນຂອງຂ້າພະເຈົ້າຂ້າມມະຫາສະຫມຸດອິນເດຍ. ຂະນະເດີນທາງໄປຜູ້ດຽວ ຂ້າພະເຈົ້າໄດ້ຫວນຄຶດແລະຊັ່ງຊາລະຫວ່າງ ກລິບ ກັບ "ລາຊາຫມາໄນ".

ກລິບເຄີຍເວົ້າປັດຊະຍາຄວາມຫນຶ່ງຫລຳໄປຫລຳມາວ່າ:

- ເຈົ້າຍິ່ງສ່ຽງຕາຍເທົ່າໃດເຂົາເຈົ້າກໍຍິ່ງຈ່າຍເງິນໃຫ້ເຈົ້າຫລາຍເທົ່ານັ້ນ.

ສ່ວນ "ລາຊາຫມາໄນ" ນັ້ນຊ້ຳຈັບມືຂ້າພະເຈົ້າໃນເວລາອຳລາກັນນັ້ນແຫນ້ນໆດ້ວຍຄວາມສະຫນິດສະຫນົມແລະເວົ້າວ່າ:

- ເດີນທາງໂຊກດີເດີ ເຊບຸຍແອນ. ຂໍເພື່ອນຢ່າໄດ້ເອົາຊີວິດເຂົ້າສ່ຽງໄພເພື່ອເງິນເລີຍ.

ໂອ, ໃນໂລກນີ້ມີຄົນແຕກຕ່າງກັນບໍ່ຈັກວ່າເທົ່າໃດເດ...

ທີ່ສະຫນາມຫລວງຢູ່ຂ້າງທ່າເຮືອ ການກຸດຕາ ສຽງພິດພີ່ທີ່ນັນຂອງຕົວເມືອງໃຫຍ່ນັ້ນໄດ້ເຮັດໃຫ້ຫູຂອງຂ້າພະເຈົ້າຫນວກອື້ງໄປ. ສຽງລົດລາງແລ່ນຄືບໆ, ສຽງແກລົດດັງເປບໆປິບໆ, ສຽງຮ້ອງແຜດເຍີກໆເຍີງຂອງກຳມະກອນແບກຫາມແລະພວກແມ່ຄ້າຊາວຂາຍ, ສຽງຂຸ້ຍຂອງນັກສະແດງທີ່ເປົ່າຈົນຫູດັບຕັບໄຫມ້, ສຽງເສບການສະແດງຫລິ້ນກົນ ແລະສຽງວານໄຫວ້ຮ້ອງຂໍຂອງຄົນຂໍທານ ໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມຕົກຂະນ່ານບ່າໃຈຄໍໄປ, ເພາະຂ້າພະເຈົ້າໄດ້ຊິນເຄີຍກັບຄວາມມິດງຽບຂອງມະຫາສະຫມຸດໃນກ້ຽວເດີນທາງຫວ່າງຢ່ານີ້ແລ້ວ.

ທັງສົນລະວົນທັງລັ່ງໆເລງ, ຂ້າພະເຈົ້າຢືນເບິ່ງປ້າຍໂຄສະນາຂອງໂຮງແຮມຕ່າງໆແລະຄິດໄລ່ເບິ່ງວ່າຕົນຈະໄປໃສ. ຈະຕ້ອງປະຫຍັດເງິນຈຳນວນທີ່ເຫລືອຢູ່ພຽງນ້ອຍດຽວ ຫລັງຈາກການເດີນທາງຫວ່າງຢ່ານີ້ໄວ້. ເຄື່ອງຂອງທັງຫມົດຂອງຂ້າພະເຈົ້າມີພຽງແຕ່ຫີບເດີນທາງຫນ່ວຍຫນຶ່ງເທົ່ານັ້ນເຊິ່ງໃນນັ້ນບໍ່ມີສິ່ງໃດເປັນຂອງມີຄ່າເລີຍ.

ພວກພໍ່ຄ້າຊາວຂາຍຈຳນວນຫນຶ່ງມາປິດອ້ອມເອົາຂ້າພະເຈົ້າໄວ້ແລ້ວກໍຈ່າວຂາຍເຄື່ອງ. ເຂົາເຈົ້າຕິດສ້ອຍຫ້ອຍຕາມຂ້າພະເຈົ້າໄປຢ່າງບໍ່ລົດລະ ຄືຫມາພານຕ້ອງກິ່ນເນື້ອ, ແລະຂ້າພະເຈົ້າກໍປະກົດມີຄວາມສວ່າງໃຈຍິ່ງ ເມື່ອມີຄົນຜູ້ຫນຶ່ງແຕ່ງໂຕໂກ້ເກັ້ມາເວົ້າກັບພວກເຂົາວ່າ:

- ພໍແລ້ວ, ປ່ອຍໃຫ້ເພິ່ນໄປເຍີ!

ຂ້າພະເຈົ້າແປກໃຈທີ່ສຸດ ເມື່ອເຫັນພວກເຂົາຟັງຄວາມແລະຫນີອອກໄປຢ່າງບອກນອນສອນງ່າຍ.

ຜູ້ທີ່ຫາກໍເວົ້ານັ້ນກາມຂ້າພະເຈົ້າວ່າ:

- ເຈົ້າເດີນທາງມາດີ ຊິເມື່ອຍຫລາຍບໍ?

ຂ້າພະເຈົ້າບໍ່ຢາກສົນທະນາກັບຄົນທີ່ຫາກໍພົບພໍ້ກັນເປັນຄັ້ງທຳອິດ, ດັ່ງນັ້ນຈຶ່ງມິດຢູ່ ປະກົດວ່າຄົນຜູ້ນັ້ນ ກໍບໍ່ຢາກເຮັດໃຫ້ຂ້າພະເຈົ້າຜິດໃຈ, ລາວຈຶ່ງເວົ້າຕື່ມພຽງສອງສາມຄຳ:

- ກ້າເຈົ້າບໍ່ມີຍາດຕິພີ່ນ້ອງ, ແລະບໍ່ຄຸ້ນເຄີຍກັບໃຜໃນແດນນະຄອນເມືອງຄົນແຫ່ງນີ້ແລ້ວຈຶ່ງໄປຊອກຫາເຮືອນນ້ຳເບີ ຫນຶ່ງຮ້ອຍຫນຶ່ງ ຢູ່ກະຫນົນ ເດລີໂຮດ. ນັ້ນແມ່ນຫ້ອງການຈັດຫາງານຂອງ "ເຣລີແລະບຸດຊາຍ". ບໍລິສັດນັ້ນຍັງເປັນຜູ້ຈັດການທຸລະກິດອີກຫລາຍໆຢ່າງ. ເຣລີລູກຈະເປັນຜູ້ຊັບຊ້ອນວຽກງານໃຫ້ເຈົ້າໃນໄລຍະດົນ. ແຕ່ຕ້ອງຕໍ່ລອງລາຄາກັບເຂົາ ຄືກັບຕໍ່ລາຄາສິນຄ້າຢູ່ໃນຕະຫລາດຫັ້ນ. ເຂົາມີນິດໄສຫລອກຕົ້ມຜູ້ມາໃຫມ່ສະເຫມີ.

ຂ້າພະເຈົ້າຂອບໃຈຄົນແປກຫນ້ານັ້ນແລ້ວມຸ່ງຫນ້າໄປຍັງກະຫນົນ ເດລີໂຮດ. ຄວາມຮ້ອນຄືໄຟລົນນັ້ນໄດ້ພາໃຫ້ຂ້າພະເຈົ້າອ່ອນເພຍໄປ, ຍ້ອນແນວນັ້ນຂ້າພະເຈົ້າຈຶ່ງຮູ້ສຶກວ່າຫວາງຫາດເປັນຢ່າງຍິ່ງ, ເມື່ອໄດ້ກ້າວເຂົ້າໄປເຖິງຫ້ອງເຮັດວຽກທີ່ເຢັນຊື່ນຂອງທ່ານຫົວຫນ້າຫ້ອງການຈັດຫາງານ. ເທິງເພດານ, ພັດລົມໃຫຍ່ໃບຫນຶ່ງພວມແລ່ນຢູ່ຢ່າງນຸ່ມນວນ. ຜ້າມ່ານປ່ອງຢ້ຽມໄດ້ລົດຜ່ອນແສງແດດອັນຮ້ອນຈັດທີ່ສ່ອງທັ່ງເຂົ້າມາແຕ່ເບື້ອງນອກ. ຂ້າພະເຈົ້າບໍ່ສາມາດຈະສັງເກດເຫັນຄົນຜູ້ທີ່ນັ່ງສະເງີ່ຍເຄີຍຢູ່ໃນຕັ່ງນວມຫຸ້ມຫນັງ ທີ່ຕັ້ງຢູ່ຂ້າງໂຕະທຳງານຫນ່ວຍໃຫຍ່ແລະກ້ວາງນັ້ນໄດ້ໃນທັນທີທັນໃດໂລດ. ປະກົດວ່າລາວຍັງຫນຸ່ມ, ໃຫຍ່ແລະຕຸ້ຍ, ມີຜົມສີເຫລືອງແສດແລະໃສ່ແວ່ນຕາຂອບສີຄຳ. ລາວເດ່ມືຂ້າມໂຕະມາສຳພັດມືກັບຂ້າພະເຈົ້າ.

- ຂໍໂທດນຳເຈົ້າເດີ ບິນ, ຂ້ອຍບໍ່ອາດຈະລຸກຂຶ້ນມາຮັບຕ້ອນເຈົ້າໄດ້. ຄວາມຮ້ອນຈົບຫາຍວາຍວອດນີ້ ເຮັດໃຫ້ມັນສະຫມອງຂອງຂ້ອຍເລີເລື່ອນໄປ. ນອກນັ້ນພະຍາດປານດີ, ກໍພວມທໍລະມານຂ້ອຍ. ນັ່ງລົງແມ້, ເຈົ້າມາ ອິນເດຍພໍ້ດົນແລ້ວຫວະ?

- ຂ້ອຍຫາກໍມາ.

- ມາແຕ່ໃສລະ?

- ມາແຕ່ ເກັບເຕົາ. ວິສາຫະກິດທີ່ຂ້ອຍເຮັດວຽກຢູ່ນັ້ນ...

- ລົ້ມລະລາຍຫວະ? ຂ້ອຍເຂົ້າໃຈແລ້ວ. ຫມາຍຄວາມວ່າເຈົ້າມານີ້ເພື່ອຫາບ່ອນຢືນຢູ່ພາຍໃຕ້ແສງອາທິດແຫ່ງຄວາມສຸກຂອງອິນເດຍແມ່ນຕິ?

- ແມ່ນແລ້ວ, ທ່ານ ເຣລີ.

ລາວເສືອດຕາແນມຂຶ້ນມາເບິ່ງດ້ວຍອາການໃຈລອຍ.

- ແມ່ນແລ້ວ, ຄວາມອຶດຫິວມັນມີກຳລັງແຮງຄືກັບພາຍຸຢູ່ເທິງທະເລຊາຍຊາຮາຣາ, ມັນຊຸກດັນມະນຸດໄປທຸກແຫ່ງທຸກຫົນທົ່ວພິພົບນີ້. ບິດາກະວີທີ່ສັນລະເສີນໄຂ່ມຸກບູລະພາຂອງພວກຂ້ອຍໄດ້ດູດດຶງເຈົ້າມາແມ່ນບໍ່? ເອີ, ເຄີຍມີຫລາຍຄົນໄດ້ດົບໄດ້ດີຢູ່ບ່ອນນີ້ໃດ. ເດັດດ່ຽວແລະມີມານະຈິດ... - ເຣລີແນມເບິ່ງແບບນຸ່ງຖືຂອງຂ້າພະເຈົ້າດ້ວຍວາດບໍ່ພໍໃຈ, ແຕ່ລາວກໍສືບຕໍ່ສະແດງໂວຫານຂອງຕົນຢ່າງເມົາມົວ: - ກ່ອນນີ້ກນຶ່ງຮ້ອຍຫົກປີ ບັນພະບູລຸດຂອງຂ້ອຍຄື ໂຢນາຕານ ເຣລີ ໄດ້ມາຍັງ ການກຸດຕາ ແລະໄດ້ທຳການກໍ່ຕັ້ງບໍລິສັດນີ້ຂຶ້ນ. ເມື່ອມາເຖິງໃຫມ່ໆ ໃນຖົງເພິ່ນມີເງິນແຕ່ສາມອັດເທົ່ານັ້ນພ້ອມດ້ວຍຫນັງສືຢັ້ງຢືນສະບັບຫນຶ່ງຂອງພະສັງຄະລາດ ກ່ຽວກັບຄວາມເລື່ອມໃສຂອງເພິ່ນທາງດ້ານສາສະຫນາ. ປະກົດວ່າຫນັງສືນັ້ນເປັນສິ່ງສຳຄັນກວ່າ, ແລະເພິ່ນ...

ຂ້າພະເຈົ້າບໍ່ເຫັນວ່າຈະມີຫຍັງເປັນຕາສະອອນນຳເລື່ອງ ອີ່ປຸອີ່ປູ້ຜູ້ພູມພາງນຳສາສະຫນາຂອງເຣລີ, ດັ່ງນັ້ນຈຶ່ງຟ້າວກອດກະເປົານ້ອຍພ້ອມດ້ວຍໃບປະກາດສະນິຍະບັດຂອງວິທະຍາໄລດີຢັງ ອອກມາຈາກຖົງ.

- ທ່ານ ເຣລີ, ນີ້ແມ່ນເງິນຈຳນວນນ້ອຍຫນຶ່ງແລະຫນັງສືຢັ້ງຢືນ...

ເຣວີຢູ່ກະເປົາເງິນອອກຢ່າງສຸພາບ ແລະກຳເອົາໃບປະກາດະນິຍະບັດຂຶ້ນມາອ່ານສອງສາມແຖວ, ລາວເພີຍຮອຍຍິ້ມອັນນຸ່ມນວນອອກມາ.

- ວິທະຍາໄລ ດີຍັງ ຫວະ? ເອີ, ຂ້ອຍຮູ້ຈັກສິ່ງໂຕລີ້ຊິນດີ! ເຈົ້າຈົບຊັ້ນເອກ ແມ່ນຫວະ? ວິເສດ! ກ່ອນນີ້ ພີ່ນ້ອງຂອງຂ້ອຍສອງຄົນກໍຮຽນຢູ່ຫັ້ນ. ໄດ້ຮັບການຮ່ຳຮຽນຢ່າງດີເລີດ. ປະຫວັດສາດ... ກົດໝາຍ... ດີຫລາຍ... ໂອ, ທັງຊີວະສາດອີກຫວະ, ເຄມີສາດແລະ... ສິ່ງເຫລົ່ານີ້ບໍ່ສຳຄັນປານໃດສຳລັບບ່ອນນີ້ດອກ. ຄັນຊັ້ນເຈົ້າຕ້ອງການຫຍັງ?

- ວຽກເຮັດ.

ຂ້າພະເຈົ້າເວົ້າວ່າຂ້າພະເຈົ້າຢາກໄປຮຽນຕໍ່, ແຕ່ຈະຕ້ອງຫາເງິນກ່ອນ. ຂ້າພະເຈົ້າຍັງເວົ້າວ່າ ຂ້າພະເຈົ້າຢາກຈະຫມູນໃຊ້ວິຊາ ການຂອງຂ້າພະເຈົ້າເຂົ້າໃນວຽກງານທີ່ມີຜົນປະໂຫຍດ. ຂະນະນັ້ນຂ້າພະເຈົ້າຄິດເຫັນເວທີສະແດງຂອງໂຮງກາຍຍະສິນອີກເທື່ອຫນຶ່ງແລະມັນຍິ່ງເຮັດໃຫ້ຂ້າພະເຈົ້າເກີດຄວາມເບື່ອຫນ່າຍຂຶ້ນຕື່ມ.

ເຣວີ ຖາມຂ້າພະເຈົ້າຄືນ:

- ວຽກເຮັດ ຫວະ? ຮື່, ເທົ່ານັ້ນຫວະ! ຄັກຫລາຍ. ແຕ່ເລື່ອງນີ້ອາດຈະເກີນຄວາມສາມາດຂອງຂ້ອຍໃດ. ບໍ່ມີບ່ອນອີກແລ້ວ. ເວົ້າແທ້ແລ້ວກໍຍັງມີບ່ອນເຮັດຢູ່, ກຸ່ມເກໄປ, ແຕ່... ແຕ່ບ່ອນຕ່າງໆເຫລົ່ານັ້ນບໍ່ເຫມາະສົມກັບເຈົ້າ...

- ທ່ານ ເຣວີ, ຂ້າພະເຈົ້າບໍ່ຄ່ອຍເຂົ້າໃຈໃນສິ່ງທີ່ທ່ານຫາກໍເວົ້າມານັ້ນ.

- ຂ້ອຍກໍເຫັນໄດ້ແຈ້ງວ່າ ເຈົ້າບໍ່ເຂົ້າໃຈເລີຍ. - ຕໍ່ບັນຫານີ້ມັນມີບາງຈຸດພິເສດທີ່ອ່າວສັບສົນສຳລັບແຖບນີ້. ມີບາງວຽກຊາວທ້ອງຖິ່ນແລະເຄິ່ງທ້ອງຖິ່ນສາມາດເຮັດໄດ້ ແຕ່ຊາວເອີລົບຊ້ຳເຮັດບໍ່ໄດ້, ໂດຍສະເພາະແມ່ນເຈົ້າຊຶ່ງເປັນພີ່ນ້ອງຮ່ວມຊາດຂອງຂ້ອຍ. ເຈົ້າເປັນຄົນທ້ອງຖິ່ນໃດລະ?

- ຢູ່ ແອຊູໂອເອີ.

- ພຸດໂທເອີຍ, ແອຊູໂອເອີຫວະ!... ຈັ່ງແມ່ນຫຍຸ້ງ. ຕໍ່ສາຍຕາຂອງຄົນຢູ່ນີ້, ພວກເຮົາຫມົດທຸກຄົນຕ້ອງສະແດງຕົນເປັນສຸພາບບູລຸດທີ່ຫນ້ານັບຖືຢ່າງແທ້ຈິງ, ຍາມໃດກໍຕ້ອງແຖຫນວດໃຫ້ກ້ຽງເກົາ, ນຸ່ງຖືຮຽບຮ້ອຍຢູ່ສະເຫມີແລະການປະພຶດຕໍ່ຊາວທ້ອງຖິ່ນຕ້ອງເຢັນ

ຊາ, ແຂງກະດ້າງແລະບໍ່ໃຫ້ມີຄວາມສະນິດສະຫນົມແຕ່ຢ່າງໃດ. ເຊື່ອແນ່ວ່າເຈົ້າຄົງຮູ້ຈັກບັນຫານີ້ດີ ແຕ່ຄາວຍັງຮຽນຢູ່ວິທະຍາໄລພຸ້ນແລ້ວ? ມີແຕ່ເຮັດແບບນັ້ນ ເຈົ້າຈຶ່ງຈະປະສົບຜົນສຳເລັດໄດ້.

ຂ້າພະເຈົ້າເຫັນວ່າ ເຮລີເວົ້າເສືອກອອກນອກເລື່ອງ ດັ່ງນັ້ນຂ້າພະເຈົ້າຈຶ່ງເວົ້າກັບລາວຢ່າງເຢັນຊາແລະແຂງກະດ້າງວ່າ:

- ທ່ານ ເຮລີ, ຂ້າພະເຈົ້າຢາກເວົ້າກ່ຽວກັບເລື່ອງວຽກງານຫລາຍກ່ວາ...

ເຮລີງຶກຫົວ.

- ບໍລິສັດຂອງພວກຂ້ອຍມີຄວາມສາມາດສູງໃນດ້ານນີ້. - ລາວກຳເອົາປຶ້ມເຫລັ້ມຍາວໆຢູ່ເທິງໂຕະ, ເທິງຫລັງປົກຂຽນວ່າ: "ບັນທຶກວຽກ" ແລ້ວເລີ່ມເປີດໄປເທື່ອລະຫນ້າ: - ຄົນເຮັດສວນ, ຄົນຍາມປະຕູໂຮງແຮມ... ຂ້ອຍບໍ່ສາມາດຈະໃຫ້ເຈົ້າເຮັດວຽກນັ້ນໄດ້... ຮື້, ພັນຕີ ເຊແວັດ ຕ້ອງການຊອກພໍ່ຄົວຜູ້ຫນຶ່ງ... ເຊື່ອແນ່ວ່າ ຂ້ອຍຈະສົ່ງຄົນຈີນຜູ້ຫນຶ່ງໄປໃຫ້ລາວ, ຖ້າໄດ້ພວກນັ້ນຄືວກິນແລ້ວ ນັບວ່າວິເສດ... ເອີ, ນີ້... ແຕ່... - ເຮລີປົງປຶ້ມລົງໂຕະແລ້ວເວົ້າຢ່າງນິ້ມນວນ: - ຊາວຫ້າ...

ຂ້າພະເຈົ້າແນມເບິ່ງລາວດ້ວຍຄວາມແປກໃຈ.

- ຈັ່ງໃດ?

ໃບຫນ້າອ່ອນນຸ່ມຂອງລາວມີຮອຍຍິ້ມອ່ອນຫວານປະກົດຂຶ້ນ.

- ແຕ່ລະອາທິດເຈົ້າຕ້ອງຈ່າຍຄ່າບໍລິການ ມາໃຫ້ຫ້ອງການຂອງພວກຂ້ອຍຊາວຫ້າສ່ວນຮ້ອຍຂອງຈຳນວນເງິນທີ່ເຈົ້າໄດ້ຮັບນັ້ນ, ກຳນົດຫນຶ່ງປີ. ແມ່ນຄ່າຈັບຈ້ອນ, ປຶກສາຫາລື, ແລະແນະນຳຕ່າງໆ...

ຂ້າພະເຈົ້າຄຶດສະເດືອກຂຶ້ນມາໄດ້ວ່າຈະຕ້ອງມີການຕໍ່ລອງກັນ ດັ່ງນັ້ນ ຂ້າພະເຈົ້າຫາງຍິ້ມນ້ອຍໆທັງເວົ້າດ້ວຍນ້ຳສຽງແຂງກະດ້າງວ່າ:

- ສິບສ່ວນຮ້ອຍກໍພໍແລ້ວ, ແລະຈ່າຍໃຫ້ໃນກຳນົດສາມເດືອນ.

ເຮລີບໍ່ຕົກລົງ, ເປັນອັນວ່າພວກເຮົາເລີ່ມມີການຕໍ່ລອງກັນ. ຂ້າພະເຈົ້າບໍ່ອ່ອນຍອມຕໍ່ເຂົາໂດຍຫວັງວ່າ ຖ້າຕົກລົງລາຄາກັນບໍ່ໄດ້ແລ້ວ ກໍມີແຕ່ຫນີໄປເທົ່ານັ້ນແລ້ວ, ຢູ່ນີ້ ບໍ່ແມ່ນ

ວ່າຈະມີແຕ່ຫ້ອງການຂອງເຂົາຜູ້ດຽວ. ແຕ່ເຮລີ ຍົກເຫດຍົກຜົນຕ່າງໆຂຶ້ນມາອ້າງອີງ, ເຂົາລັ່ງນ້ຳເຍັນຂ້າພະເຈົ້າຈອກໜຶ່ງແລ້ວ ກໍກັບມາໄລ່ລາຍໄດ້ລາຍເສຍກັບຂ້າພະເຈົ້າດ້ວຍການຄິດໄລ່ຕົວເລກ. ສຽງຂອງເຂົາຫວານຈ້ອຍໆຈົນພາໃຫ້ຂ້າພະເຈົ້າຕ້ອງອະນຸໂລມຕາມ.

- ສິບສ່ວນຮ້ອຍ, ຈ່າຍໃນຂອບເຂດສີ່ເດືອນ. ເຮລີ ຫົວ.

- ບິນເອີຍ, ເຈົ້າມີພອນສະຫວັນທາງດ້ານນັກການຄ້າແລ້ວ. ຂ້ອຍຮູ້ສຶກສະບາຍໃຈເມື່ອໄດ້ສົນທະນາກັບຄົນທີ່ມີຄຸນທາດແບບນີ້. ຂໍອວຍພອນເຈົ້າ... ເຈົ້າໄດ້ວຽກເຮັດແລ້ວ...

ຂ້າພະເຈົ້າຮ້ອງຂຶ້ນ.

- ຂ້ອຍບໍ່ເຄີຍເປັນພໍ່ຄ້າຈັກເທື່ອ!

- ພຸດໂທເອີຍ, ເຈົ້າຖືຂ້ອຍເປັນຄົນແບບໃດໄປ! -ເຮລີຍົກສອງມືອັນຕຸ້ຍພີບັ້ນຂຶ້ນ. - ຂ້ອຍບໍ່ສົ່ງເຈົ້າໄປຫາ ພັນຕີ ເຊແວັດ ດອກ. ເວົ້າຫັ້ນກະກຸ້ມຫັ້ນວ່າ, ລາວແມ່ນອີ່ດາເກົ້າຂີ້ໂມໂຫຄົນໜຶ່ງແມ້ກະທັ້ງຄົນຈີນກໍຢູ່ນຳລາວບໍ່ໄດ້. ບໍ່, ເຈົ້າຈະເຂົ້າໄປເຮັດວຽກນຳທ່ານ ໂປນລົກ ພຸ້ນຕ່າງຫາກ. ລາວແມ່ນເຈົ້າຂອງໂຮງງານຢາສູບແຫ່ງໜຶ່ງ. ລາວພວມຕ້ອງການຊາຍສະກັນຜູ້ໜຶ່ງທີ່ເຮັດວຽກ, ແລະສາມາດໄວ້ໃຈໄດ້ໃນເວລາກຶກສົ່ງໄປເຮັດວຽກຕາມນິຄົມຢາສູບຂອງລາວ. ແລ້ວເຈົ້າຈະມັກວຽກນັ້ນເອງດອກ.

ເຮລີ ກົດກະດິ່ງໄຟຟ້າຄ່ອຍໆ. ພໍສຽງກະດິ່ງດັງກລິ່ງຂຶ້ນຢູ່ເບື້ອງນອກ ເທົ່ານັ້ນ, ທັນໃດກໍມີຊາວອິນເດຍໜຸ່ມຜູ້ໜຶ່ງນຸ່ງເສື້ອເຊີດສີຂາວມາປະກົດຕົວຢູ່ຂ້າງປະຕູທັນທີ.

- ອາລີ, ພາທ່ານບິນ ໄປຫາທ່ານ ບຣາຍແດ່, -ເຮລີເຮັດຄືວສົນເຂົ້ານ້ອຍໜຶ່ງ ໃນລະຫວ່າງອອກຄຳສັ່ງຕໍ່ຄົນໃຊ້, ແລ້ວຫັນມາຫາຂ້າພະເຈົ້າດ້ວຍສີໜ້າທີ່ມນວນ: - ຂ້ອຍຈະໂທລະສັບໄປໃຫ້ຫົວໜ້າຫ້ອງການເຮັດສັນຍາກັບເຈົ້າໂລດ. ໂຊກດີເດີ ບິນ! ຫວັງວ່າມື້ໜຶ່ງໃນເວລາອັນໃກ້ນີ້ ເຈົ້າຈະມາຢາມຂ້ອຍອີກ ແລະຂ່າວໃຫ້ຂ້ອຍຮູ້ວ່າ ເຈົ້າພໍໃຈເຮັດວຽກນຳທ່ານ ໂປນລົກ ຫລືບໍ່...

ໂອ, ຂະນະນັ້ນຂ້າພະເຈົ້າຍັງຂາດປະສົບການແລະບໍ່ເຂົ້າໃຈມະນຸດເລີຍ. ສຳລັບທ່ານເຮລີນັ້ນ ຂ້າພະເຈົ້າສົງໄສແຕ່ສະເພາະທ່າທີອັນຍິ້ມແຍ້ມແຈ່ມໃສເກີນຄວນຂອງລາວຕໍ່ຂ້າພະເຈົ້າພຽງຢ່າງດຽວເທົ່ານັ້ນ. ທ່ານ ບຣາຍ ໄດ້ກະກຽມສັນຍາໃຫ້ຂ້າພະເຈົ້າ, ລາວເປັນຄົນ

ທີ່ສຸຂຸມແລະມີທ່າທີສຸພາບແຕ່ແລ້ວຂ້າພະເຈົ້າກໍຕ້ອງຈ່າຍເງິນລ່ວງຫນ້າໃຫ້ແກ່ທ່ານ ເຮລືອາ ທຶດຫນຶ່ງ. ຂ້າພະເຈົ້າຖືຫນັງສືແນະນຳຂອງບໍລິສັດ "ເຮລີແສະບຸດຊາຍ" ໄປໂຮງງານຢາສູບຂອງທ່ານ ໂປນລິກ.

ບັນດາກະຫນົນຫົນທາງທີ່ຂ້າພະເຈົ້າຜ່ານໄປນັ້ນລ້ວນແຕ່ເປິເປື້ອນ ແລະຫນ້າເບື່ອຫນ່າຍ. ມັນເປັນພຽງແຕ່ຮ່ອມແຄບອັນຫນຶ່ງຢູ່ຫວ່າງກາງຂອງເຮືອນຫ້ອງແຖວສອງຊັ້ນເທົ່ານັ້ນ. ຂ້າພະເຈົ້າຕ້ອງໂດດຂ້າມບວກນ້ຳຂີ້ດິນຢູ່ເປັນປະຈຳ. ທາງຍ່າງກໍຮອດບໍ່ມີຊ້ຳ. ຢູ່ກ້ອງບັນດາລະບຽງເຮືອນຊັ້ນຕ່າງໆນັ້ນເຫັນມີແພຜ້າແພຂາດແຂວນຕະຊະຢູ່. ພວກເດັກນ້ອຍເປື້ອຍກາຍ, ເນື້ອຫນັງສີທອງແດງພາກັນເກືອກກົ້ວນົວຍອກຢູ່ເທິງກອງຂີ້ຝຸ່ນແລະດິນຊາຍ, ພວກມັນໄດ້ຫລິ້ນເກມທີ່ໄຮ້ສາລະຢ່າງຫນຶ່ງຄືໂຍນເສດກ້ວຍກະເບື້ອງໃສ່ຂຸມດິນ. ສະເພາະພວກເດັກນ້ອຍແລ້ວ ບໍ່ວ່າເວລາໃດຢູ່ແຫ່ງໃດກໍເປັນເຊັ່ນນີ້ທັງນັ້ນ. ພວກຜູ້ຍິງທີ່ໃຊ້ແພນາງສີຄຸມພົມທີ່ຍາວຍຽດແລະດຳຂຳນັ້ນ ຄອນໆກໍຮ້ອງໄປໃສ່ພວກເດັກນ້ອຍດ້ວຍສຽງກ້ອງຫອງ, ສ່ວນພວກຜູ້ຊາຍນັ້ນ ເປື່ອຍຄືງຄິ່ນລິ່ນ, ເຂົາເຈົ້ານັ່ງອີງຢູ່ຂ້າງຕີນກຳແພງແລະບໍ່ໄດ້ສົນໃຈເກີງຂ້າພະເຈົ້າເລີຍ.

ໂຮງງານແມ່ນເຮືອນກໍ່ດິນຈີ່ສອງສາມຫລັງທີ່ມີຮົ້ວອ້ອມໄວ້. ຂ້າພະເຈົ້າເດີນຜ່ານສາງຫລັງຕ່າງໆທີ່ໄຂປະຕູໄວ້, ຢູ່ນັ້ນ ພວກເດັກຍິງຊາຍອິນເດຍພວມເລືອກເພັ້ນມັດຢາສູບຕ່າງໆຢູ່. ເຂົາເຈົ້າຊີ້ມື ໃສ່ເຮືອນຫລັງຫນຶ່ງທີ່ຕັ້ງເລີກເຂົ້າໄປໃນເດີ່ນໃຫ້ຂ້າພະເຈົ້າ. ຢູ່ຕໍ່ຫນ້າລະບຽງນັ້ນມີຄົນໄຊ້ສອງຄົນພວມຍືນຈັບແຄ່ມມ້າພັນງາມ, ສົມສ່ວນໂຕຫນຶ່ງ ມີຂົນສີນ້ຳຕານ. ເມື່ອຂ້າພະເຈົ້າຍ່າງໄປເກີງທີ່ນັ້ນກໍມີຄົນຈ່ອຍສູງຜູ້ຫນຶ່ງຍ່າງອອກມາຍັງລະບຽງ. ລາວນຸ່ງຊຸດສຳລັບຂີ່ມ້າທີ່ຫລູຫລາ. ລາວເອົາແສ້ມ້າດ້າມເງິນຫນີບຂີ້ແຮ້ແລ້ວຕິດດຸມແຕັບກຶງມືທີ່ເຮັດດ້ວຍຫນັງອ່ອນ.

ນັ້ນຄືທ່ານ ໂປນລິກ. ອ່ານຈົດຫມາຍນັ້ນແລ້ວ, ລາວເສືອກຕາແນມເບິ່ງຂ້າພະເຈົ້າດ້ວຍວາດເສີຍເມີຍ, ຈາກນັ້ນ ໃບຫນ້າທີ່ແຖຫນວດກັງເກົາຂອງລາວກໍຍຸ້ມຫົວຂຶ້ນຄ່ອຍໆ.

- ເຈົ້າຈະເປັນພະນັກງານຜູ້ທີສອງປະຈຳນິຄົມທີ່ ວາຄຣາດ. ເຊີນເຈົ້າເຂົ້າໄປໃນຫ້ອງການ.

ພວກຄົນໃຊ້ໄດ້ຈູງມ້າພັນມາໃຫ້ແກ່ ໂປນລິກ. ລາວແກວ່ງແສ້ດ້ວຍທ່າທາງທີ່ມີສະຫງ່າລາສີແລ້ວໂດດຂຶ້ນອານມ້າຢ່າງຄ່ອງແຄ້ວ. ມ້າຈຶ່ງແລ່ນຫອບຜ່ານເດີ່ນມຸ່ງໜ້າໄປທາງປະຕູ.

ຕ້ອງສາລະພາບວ່າຂ້າພະເຈົ້າໄດ້ແນມນຳຄົນຂີ່ມ້າທີ່ພວມຄ່ອຍໆຫາຍລັບໄປນັ້ນດ້ວຍສາຍຕາອິດສາ.

ພາຍໃນຫ້ອງການຂອງໂຮງງານມີພະນັກງານປະມານສິບຄົນ ພວມໝົກໝຸ້ນຢູ່ນຳປຶ້ມບັນທຶກຄິດໄລ່. ໂດຍຜ່ານທ່ານຫົວໜ້າຫ້ອງການ, ທີ່ມີຊື່ວ່າ ແກັສເຊີ, ເຊິ່ງເປັນຊາຍຊະລານ້ອຍຫົວລ້ານຄົນໜຶ່ງນັ້ນ, ຂ້າພະເຈົ້າຈຶ່ງສາມາດຮູ້ຈັກສິ່ງຈຳເປັນຕ່າງໆທີ່ຂ້າພະເຈົ້າຄວນຈະຮູ້ໄດ້ຢ່າງລະອຽດ.

ຊາຍຊະລາ ແກັສເຊີ ຫຼິບຕາຟາງທັງຄູ່ມາເບິ່ງຂ້າພະເຈົ້າ.

- ບ່າຍມື້ນີ້ ດະຍິມຄາ ກໍຈະໄປຫັ້ນ, ໝໍເຮັດວຽກຢູ່ ວາຄຣາດ ມາດົນແລ້ວ. ເຈົ້າຈົ່ງໄປພ້ອມກັນກັບມັນ, ເຈົ້າໄປຊອກຫາມັນສາ, ຢູ່ບໍລິເວນນີ້ດອກ.

ຂ້າພະເຈົ້າຍັງບໍ່ທັນໄປຊ້ຳ ທັນໃດນັ້ນກໍໄດ້ຍິນສຽງກະດິງດັງຂຶ້ນ, ທົ່ວທັງຫ້ອງການສິດຊື່ນ, ມີຊີວິດຊີວາຂຶ້ນຢ່າງແຈ່ມແຈ້ງ. ໂຕະຕັ່ງກຶກຊຸກຢູ້, ສຽງອັດລິ້ນຊັກດັງກຶບໆກັບໆ, ສຽງພະນັກງານໂອ້ລົມກັນພິດພີ່ພື້ນັ້ນຂຶ້ນ. ຢູ່ຫ້ອງຂ້າງນັ້ນ, ພວກຍິງສາວພິມດີດພວມຍ່າງອອກມາ, ເຂົາເຈົ້າຢອກໃຍກັນຫົວອຶກກະທຶກ.

ໝໍໜຶ່ງຜິວອ່ວເປັນສີແດງແສດ, ຫລັງຈາກອັດລິ້ນຊັກຕູ້ປຶ້ມໄວ້ແລ້ວ ເຂົາສຸບໝວກເພື່ອງໃສ່ຫົວແລະໃນຂະນະດຽວກັນນັ້ນ ເຂົາໄດ້ງວາກໜ້າແນມມາທາງຂ້າພະເຈົ້າ.

- ເຮັນໂລ, - ລາວໃຫ້ສັນຍານທັກທາຍ. - ຄືຈັ່ງວ່າເຈົ້າເປັນຄົນໃໝ່ແມ່ນຫວະ? ມາທຳຄວາມຮູ້ຈັກກັນເທາະ. ຂ້ອຍຄື ຄາ ...

- ເຈົ້າແມ່ນ ດະຍິມຄາ ແມ່ນບໍ່? - ຂ້າພະເຈົ້າຖາມແລະສຳພັດມືກັບເຂົາ. - ຂ້ອຍພວມຊອກຫາເຈົ້າຢູ່. ຂ້ອຍຖືກແຕ່ງຕັ້ງໃຫ້ເປັນພະນັກງານຫ້ອງການຢູ່ນີ້ຄືມ ...

ພຽງແຕ່ແລກປ່ຽນນຳກັນສອງສາມຄວາມເທົ່ານັ້ນ ພວກເຮົາກໍສາມາດກຳທຸກບັນຫາໄດ້ໂລດ.

- ເອົາລະ. ຂະນະນີ້ພວກເຮົາຕ້ອງຫລົບໜີໄປຈາກນີ້ກ່ອນ ເພື່ອບໍ່ໃຫ້ອີຕາເກົ້າ ແກັດ

ເຊີ່ງທັນເມືອງເຫັນ, - ດະຍິມ ຊວນຂ້າພະເຈົ້າ, - ເຣົາຍັງຂຽນຕອນທ້າຍຂອງເອກະສານສະບັບຫນຶ່ງບໍ່ທັນແລ້ວ, ແນ່ນອນວ່າອີ່ຕາເກົ້າ້ນັ້ນຈະຈ່ອງດຶງເຣົາໄວ້. ແລ້ວເຣົາຊ້ຳພວມຫິວຈວນຈະຕາຍຢູ່ຄືກັບເສືອກ່ອນເວລາຕາເວັນຈວນຈະຕົກດິນນີ້ແຫລະ. ເບິ່ງໂຕກໍຄືຊິພວມຢາກກິນຄືກັນ. ເຣົາຮູ້ບ່ອນກິນດີໆ. ມີຮ້ານອາຫານຫນຶ່ງຄັກສົມຄວນທັງລາຄາກໍຍ່ອມເຍົາ. ກິນແລ້ວພວກເຣົາຈະກັບມາຟັງອີ່ຕາເກົ້າ ແກ້ສເຊີ່ງສອນແນະນຳ, ແລ້ວພວກເຣົາຈຶ່ງອອກໄປສະຖານີລົດໄຟ.

ຕາມໄລຍະທາງໄປສູ່ຮ້ານອາຫານແລະໃນຂະນະທີ່ຮັບປະທານຢູ່ນັ້ນ ດະຍິມສໍ້ການຂ້າພະເຈົ້າເກືອງທຸກເລື່ອງເອົາໂລດ.

- ຈັ່ງໃດໂຕຈຶ່ງຄົ້ນພົບບ່ອນຂອງໂປນລິກນີ້? ຜ່ານຈາກອີ່ຕາເກົ້າ ເຮລີ ຫວະ? ມັນຄືນັກຕົ້ມຊຸ່ນຍອດ. ພວກລູກມືຂອງມັນໃນຂະນະທີ່ໄປລ່າຕົກລູກຄ້ານັ້ນລ້ວນແຕ່ທຳທ່າເປັນຄົນທີ່ບໍ່ມີສ່ວນກ່ຽວຂ້ອງຫຍັງກັບເລື່ອງນັ້ນ. ຍິ່ງກວ່ານັ້ນ ຍັງບອກໃຫ້ໂຕຮູ້ລ່ວງຫນ້າໄວ້ວ່າຈະຕ້ອງຕໍ່ລອງລາຄາຄ່າບໍລິການນຳອີກ. ມັນໄຖຂອງໂຕໄປຈັກສ່ວນຮ້ອຍລະ?

- ສິບສ່ວນຮ້ອຍໃນສີ່ເດືອນ.

- ຈ່າຍໃຫ້ມັນຫົກສ່ວນຮ້ອຍກໍພໍ. ລວມແລ້ວເປັນສອງສ່ວນຮ້ອຍຕໍ່ຫນຶ່ງປີ, ພົນກຳໄລຈຳນັ້ນແມ່ນສົມມາສົມຄວນແລ້ວ. ບຶນ, ໂຕຍັງຂາດປະສົບການ. - ດະຍິມເວົ້າຢ່າງເຄັ່ງຂຶມ. - ຈົ່ງເຊື່ອຄວາມເຣົາ. ໂຕຈະຕ້ອງກຳໄດ້ບັນດາຮີດຄອງປະເພນີແລະອຸປະນິດໄສຂອງຄົນແກບນີ້ ບໍ່ຊັ້ນກໍມີແຕ່ຈິບຫາຍ.

ຄວາມເວົ້າຕ່າງໆຂອງ ດະຍິມ ຊວນໃຫ້ຂ້າພະເຈົ້າຄຶດເຫັນ ເຮລີ ແລະ ລະບົບລ່າລູກຄ້າທີ່ອັບປີຂອງມັນ.

## II

ເປັນອັນວ່າຂ້າພະເຈົ້າໄດ້ໄປເກືອງ ວາຄຣາດ, ເຊິ່ງເປັນເຂດຫນຶ່ງທີ່ໄກແສນໄກບ່ອນຜີບໍ່ທ່ອງຄົນບໍ່ຫຽວ, ຕັ້ງຢູ່ບໍລິເວນປ່າດົງທີ່ຕຶບຫນາໃນເຂດກາງຂອງ ແປັນຢາບ. ຫມູ່ບ້ານທີ່ທຸກຍາກຂາດເຂີນຈຳນວນຫນຶ່ງຕັ້ງໂຮມກັນຢູ່ຕາມແຄມຝັ່ງເຊສາຍຫນຶ່ງ, ສ່ວນອ້ອມຂ້າງນັ້ນແມ່ນບັນດາທົ່ງນານ້ອຍໆຂອງຊາວນາແລະບັນດານິຄົມອັນກວ້າງຂວາງຂອງທ່ານ ໂປນລິກ.

ແນມຈາກລະບຽງເຮືອນຫລັງທີ່ຂ້າພະເຈົ້າແລະດະຍິມພັກອາໄສຢູ່ນັ້ນ ສາມາດແນມເຫັນດູບຫລັງຕ່າງໆຂອງບ້ານ ຮົງເບຍທີ່ຕັ້ງຢູ່ໃກ້ໆນັ້ນໄດ້ຢ່າງຈັດເຈນ. ການພົວພັນຕ່າງໆກ່ຽວກັບທີ່ດິນຢູ່ນີ້ສັບສົນທີ່ສຸດ. ທີ່ດິນເປັນກຳມະສິດຂອງເຈົ້າທີ່ດິນ ດານບີຢັງ. ເຂົາດຳລົງຊີວິດຢູ່ໃນເຮືອນສອງຊັ້ນຫລັງໜຶ່ງທີ່ຕັ້ງຢູ່ໃຈກາງຂອງສວນຕົ້ນໄມ້ອັນອຸດົມສົມບູນຕອນໜຶ່ງ. ເຮືອນຂອງເຂົາປະດັບປະດາເອັຍອງແບບພິດສະດານ, ດ້ວຍລວດລາຍແກະສະຫລັກຫີນອ່ອນແລະໄມ້ຄວັດ. ດານບີຢັງ ລ້ຽງເກືອຂ້ອຍຂ້າໄວ້ເປັນຈຳນວນຫລວງຫລາຍແລະຜູ້ຈັດການຜູ້ໜຶ່ງທີ່ມີຊື່ວາແຊັກນາກ. ຫມໍນີ້ມັກຂີ່ມ້ານ້ອຍໂຕໜຶ່ງໄປຍັງໝູ່ບ້ານຕ່າງໆເພື່ອເກັບຄ່າເຊົ່າ. ໂປນລົກ ເຊົ່າບັນດານິຄົມເຫລົ່ານັ້ນ ໂດຍຜ່ານ ເວີນເຊີນທີ່ເປັນຄົນໄວ້ເນື້ອເຊື່ອໃຈທີ່ສຸດແລະມອບໃຫ້ເຂົາເປັນຜູ້ບໍລິຫານ. ເພິ່ນຜູ້ນີ້ບັນຊາໄປຫມົດນັບທັງພວກເຮັດຫນ້າທີ່ກຳກັບກຳມະກອນຂອງນິຄົມແລະສາງຕ່າງໆ.

ແລງມື້ໜຶ່ງ, ດະຍິມ ຖາມຂ້າພະເຈົ້າໃນຂະນະທີ່ລາວນອນຢຽດຢູ່ໃນເປແລະສູບຢາກອກຕິດກອກດໍ່ ເພື່ອໄລ່ຍຸງທີ່ບິນຂຶ້ນມາແຕ່ຝັ່ງເຊ:

- ບິນເອີຍ, ເຮົາບໍ່ເຂົ້າໃຈວ່າ ໂຕ ມາສູ່ພື້ນແຜ່ນດິນອຸບາດນີ້ເພື່ອຫຍັງ? ຊີວິດໂຕມັນພົບກັບມໍລະສຸມອັນໃດຊັ້ນຫວະ?

ຂ້າພະເຈົ້າເລົ່າກ່ຽວກັບບ້ານເກີດເມືອງນອນສູ່ລາວຟັງ. ແຕ່ບໍ່ໄດ້ເລົ່າລາຍລະອຽດເກືອງຊີວິດສ່ວນຕົວຂອງຕົນ.

ດະຍິມພຶມພຳອອກມາວ່າ:

- ຈັ່ງຊັ້ນຫວະ, ຄຶດວ່າແມ່ນຫຍັງຊັ້ນດອກ, ຊໍ່າວ່າຕ້ອງການເປັນພະນັກງານຫ້ອງການຂອງໂຮງງານຢາສູບລ້າງນັ້ນ, ຢູ່ໃນນະຄອນຫລວງໂຕກໍອາດຊິສາມາດຊອກໄດ້ຕ່ວາ. ຄືເຮົານີ້ມັນຕ່າງ, ເຮົາບໍ່ອາດຈະປ່ອນດັງເຂົ້າໄປຍັງແຫ່ງນັ້ນໄດ້. ພຽງແຕ່ເຮັດໃຫ້ພວກສາລະວັດສົງໃສພຽງນ້ອຍໜຶ່ງເທົ່ານັ້ນ, ເຮົາກໍຈຳຕ້ອງຫອບພົກໜີໂລດ...

- ເກືອງຈັ່ງໃດຂ້ອຍກໍຄືງລ້ຽງຄວາມຫວັງໄວ້ກັບສິ່ງທີ່ເປັນມິງຄຸນກວ່ານັ້ນ, - ຂ້າພະເຈົ້າເວົ້າແລະງ່ຽງສະດັບຫູຟັງສຽງຄວນເພງທີ່ດັງວ່ອນໆມາຈາກບ້ານທີ່ຢູ່ຂ້າງນັ້ນ.

ດະຍິມຕອບ:

- ບິນເອີຍ, ປະຈຸບັນນີ້ ໂດຊິມີຫຍັງມາພໍເປັນຄວາມຫວັງອີກ. ແລະແລ້ວ, ບໍ່ເກີດແຫ່ງຄວາມຫວັງນັ້ນ ກໍຈະບົກແຫ້ງລົງໄປຢ່າງໄວວາ. ເມື່ອຜູ້ໃດຜູ້ຫນຶ່ງຫາກຖືກບັງແລ້ວ ກໍມີແຕ່ຢາກຊອກຫາຕະປູດອກທີ່ຕອກໄວ້ຫນາແຫນ້ນທີ່ສຸດຢູ່ເທິງຝາເພື່ອແຂວນຄໍຕາຍດ້ວຍສາຍພາຍຫົວສິ້ງຂອງຕົນເອງ.

- ໂດເປັນຄົນເບິ່ງໂລກໃນແງ່ຮ້າຍ, - ຂ້າພະເຈົ້າເຮັດຫນ້າຫຍຸ້ງເຂົ້າ.

- ໂດຈົ່ງຄຶດທົບທວນເອງເບິ່ງ. ເຮົາປະແມ່ແລະນ້ອງສາວໄວ້ຢູ່ ກຣາອູນໂດນ, ຄຶດວ່າຕໍ່ມາຈະຊົດຊ່ວຍເຂົາເຈົ້າໄດ້. ແຕ່ສີ່ປີຜ່ານມາແລ້ວ, ເຮົາບໍ່ສາມາດເກັບທ້ອນໄດ້ພໍອັດ. ເຖິງວ່າຊີວິດການເປັນຢູ່ຈະແພງ, ແຕ່ເຮົາບໍ່ຕົກລົງສົມຮູ້ຮ່ວມຄິດແນວບໍ່ດີກັບຜູ້ຮັບເຫມົາ. ວິນຍານຂອງເຮົາຈະຕ້ອງຫ່ຽວແຫ້ງໄປຢ່າງແນ່ນອນ ຖ້າເຮົາຫາກບໍ່ຮັກສານໍ້າໃຈຊື່ສັດເອົາໄວ້. ປະຈຸບັນນີ້ກໍມີແຕ່ຢາສູບ, ເຊິ່ງເປັນສິ່ງທີ່ບໍ່ມີຄ່າພໍເທົ່າໃດໃນແຫ່ງນີ້ເທົ່ານັ້ນທີ່ຈະສາມາດເຮັດໃຫ້ຫົວສະຫມອງຂອງເຮົາປອດໂປ່ງຂຶ້ນມາແດ່, ຫວັງວ່າໂດຄົງຈະເຂົ້າໃຈ...

ດະຢິມເລົ່າເຖິງທ່ານ ໂປນລົກດ້ວຍອາດລັງກາດແລະໂຫດຮ້າຍ.

- ເມື່ອພົບກັບຫມໍໃຫມ່ໆ ໂດມີຄວາມຮູ້ສຶກຈັ່ງໃດ, ຫມໍຂີ້ມ້າບັກ ໂດລີ ເບິ່ງແລ້ວເຂົ້າທ່າແມ່ນຕີ? ຫມໍມັກໄປທ່ຽວເບີຍອາລົມແບບນີ້ເລື້ອຍ. ຊີວິດຂອງ ໂປນລົກມັນສະຫນຸກເກີນໄປ ເຖິງກັບວ່າຫມໍບໍ່ຢາກອຳລາມັນໄປກ່ອນກຳນົດ. ຫມໍຢ້ານຈ່ອຍແລະຢ້ານຕຸ້ຍພໍໆກັນ. ຫມໍຖືວ່າພິມທາງອກນັ້ນຄືລາງຮ້າຍອັນໃຫຍ່ຫລວງຂອງຊີວິດ. ຫມໍຂີ້ດູດຄວັນຢາສູບ ເຖິງແມ່ນວ່າຫມໍເອງຈະເປັນຜູ້ປູກຢາຫາລາຍໄດ້ກໍຕາມຕື່ນເຊົ້າຂຶ້ນມາ ຫມໍກໍສຽບບາຫລອດໃສ່ຂີ້ແຮ້, ວັນເສົາໃດ ທ່ານຫມໍກໍມາກິນເຂົ້າທ່ຽງຢູ່ເຮືອນຂອງຫມໍແລະຂຽນໃບຂະລໍາຂອງກິນລ່ວງຫນ້າຫນຶ່ງອາທິດໄວ້ໃຫ້ຫມໍ.

ຫລັງຈາກນັ້ນ ດະຢິມກໍກ່າວໂຈມຕີສັນດານຂອງ ເວີນເຊີນ, ເຊິ່ງເປັນຜູ້ດູແລນິຄົມຕ່າງໆ ໃນແຫ່ງນີ້.

- ຖ້າໂດຢາກເປັນຈອມໂຈນສຸພາບບູລຸດຜູ້ຫນຶ່ງແລ້ວ ຫາລະຫລັບຕາປະຕິບັດຕາມຄຳສັ່ງທຸກຢ່າງຂອງມັນ. ແລະຖ້າເຈົ້າບໍ່ຫວາດຫວັ່ນຕໍ່ໂລກອະຫິວາແລະໄຂ້ຫມາກເຫລືອງຄືພະ

ຍາດທີ່ມັນໄດ້ລ້າງຜ່ານຮ່າງຄີງຂອງເຮົານີ້ແລ້ວ, ເຊື່ອແນ່ວ່າ ໂຕຈະຕ້ອງຕຶກເບັດເອົາປາຄຳ ຈາກແຫ່ງນີ້ໄດ້, ແລ້ວກໍເອົາໄປຈືນກິນຢູ່ ແອຊູໂອເອີ ໃນຍາມຊະລາການລົງໄປ.

ດະຍິມຍັງເລົ່າເຖິງສິ່ງແປກໆຫລາຍຢ່າງໃນດິນແດນແຫ່ງນີ້, ເຖິງບ່ອນດຳລົງຊີວິດຂອງຄົນ ຈຳນວນສີ່ຮ້ອຍລ້ານ, ລວມມີແປດຮ້ອຍເຜົ່າຊົນ ແລະເວົ້າພາສາຕ່າງກັນເຖິງຫລາຍຮ້ອຍຢ່າງ ນີ້ສູ່ຂ້າພະເຈົ້າຟັງ.

ດະຍິມ ບອກຂ້າພະເຈົ້າ:

- ປົບ, ຮຽນເວົ້າພາສາ ປູຣະດູສາດ. ນັ້ນແມ່ນພາສາ "ຜະລັ່ງ" ອັນຕົ້ນຕໍຂອງອິນເດຍ ເຊິ່ງປົນເປດ້ວຍສັບຄຳເວົ້າຂອງ ອີຣານແລະ ອາຣັບ. ຊື່ຂອງພາສານີ້ອອກມາຈາກຄຳວ່າ: "ອູຣະດູ ເອມູເອັນແລ" ນັ້ນແມ່ນຊື່ຂອງຕະຫລາດເກົ່າແກ່ແຫ່ງຫນຶ່ງທີ່ຕັ້ງຢູ່ຂ້າງວັງຂອງເຈົ້າ ຊີວິດ ທີ່ ເດລີ. ໃນງານຕະຫລາດນັດທີ່ຄຶກຄື້ນລື້ນເລີງຕ່າງໆນັ້ນ, ພວກພໍ່ຄ້າຊາວຂາຍຈາກ ທຸກສາລະທິດລ້ວນແຕ່ມາເຕົ້າໂຮມກັນຢູ່ນີ້. ເຮົາຖືວ່າພາສາຊະນິດນີ້ຖືກປະດິດຂຶ້ນມາຈາກ ບ່ອນດັ່ງກ່າວ. ຊາວອິນເດຍທຸກໆຄົນລ້ວນແຕ່ຮູ້ຈັກພາສາ ອູຣະດູ, ບໍ່ຕ່າງຫຍັງກັບນັກການ ທູດຂອງປະເທດຕ່າງໆ ລ້ວນແຕ່ຮູ້ຈັກພາສາຝະລັ່ງນີ້ແຫລະ. ໂຕຢາກຮຽນບໍ່, ເຮົາຊິຊ່ວຍ ?

ຂ້າພະເຈົ້າພຽງແຕ່ກ່າວຂອບໃຈກັບດະຍິມແລະມີຄວາມສຸກໃຈເປັນຍິ່ງ, ບໍ່ພໍເທົ່າໃດຂ້າພະ ເຈົ້າກໍເວົ້າໄດ້ແດ່ເລັກນ້ອຍ, ແລະສາມາດອອກຄຳສັ່ງກັບພວກຄົນໃຊ້ໄດ້:

- ຊາ - ບາ - ນາ - ໂອ! (ຊົງຊາເດີ!) ປານີປີລານາ - ລາ - ໂອ! (ເອົານ້ຳມາໃຫ້ແດ່!)

ພະນັກງານຮັບໃຊ້ໃນນິຄົມຕ່າງໆ ລ້ວນແຕ່ຮູ້ພາສາທ້ອງຖິ່ນຕັ້ງແຕ່ສາມເຖິງຫ້າພາສາກັນ ທຸກຄົນ, ບໍ່ນັບພາສາ ອູຣະດູ. ພວກຄວບຄຸມຄົນງານເຊິ່ງເປັນຄົນທ້ອງຖິ່ນ ລ້ວນແຕ່ເປັນ ລູກມືໃຫ້ແກ່ທ່ານ ເວີນເຊີນ ໃນການກັກຕຸນສິນຄ້າປະເພດຕ່າງໆທີ່ຊື້ມາໄດ້ໂດຍຜ່ານພວກ ຈຳນຳທີ່ເກັບຄ່າດອກເບ້ຍຫນັກໃນທ້ອງຖິ່ນ. ທີ່ວິທະຍາໄລ ດີຍັງ ເຂົາເຈົ້າບໍ່ໄດ້ສອນສິ່ງຕ່າງໆ ເຫລົ່ານີ້ໃຫ້ແກ່ຂ້າພະເຈົ້າ, ດັ່ງນັ້ນເລື່ອງຕໍ່ໄປນີ້ ຂ້າພະເຈົ້າຈຶ່ງລ້ວນແຕ່ຖືວ່າເປັນເລື່ອງແປກ ປະຫລາດ: ໃນຊົນນະບົດມີຊາວ "ກາເມຍ" ທີ່ເປັນຊາວນາລູກຫນີ້ຂອງພວກຮັບຈຳນຳຫນ້າ ເລືອດນັ້ນ ແລະຈະຕ້ອງພາລູກພາເມຍໄປເປັນທາດພວກເຂົາຕະຫລອດຊີວິດ, ຫມາຍຄວາມ ວ່າເປັນຂ້າທາດຢ່າງແທ້ຈິງຕາມຄວາມຫມາຍອັນຄົບຖ້ວນຂອງພະຍາງນີ້.

## III

ຜູ້ບໍລິຫານນິຄົມຄື ເວີນເຊີນ ເປັນຄົນຕຸ້ຍຕ່ຳ, ຂາສັ້ນ, ພວມລຳຄານເພາະຄວາມຮ້ອນຈັດ, ລາວເລືອກເອົາຕົ້ນມ່ວງທີ່ຮົ່ມເຢັນສົມຄວນກົກຫນຶ່ງແລ້ວນັ່ງດື່ມແກ້ຫິວດ້ວຍນ້ຳໂຊດາປະສົມເຫລົ້າວິສະກີຊະນິດຫນຶ່ງ.

-ຂ້ອຍດີໃຈທີ່ສຸດ ທີ່ເຈົ້າເອົາໃຈໃສ່ ຮຽນພາສາ, -ເວີນເຊີນເວົ້າ, ພ້ອມທັງແນມຜ່ານແວ່ນຕາທີ່ເກາະເຕື່ອຍໆຢູ່ັ້ນມາເບິ່ງຂ້າພະເຈົ້າ. -ການຮູ້ຈັກພາສາຕ່າງໆມັນເປີດລະດັບຮັບຮູ້ຂອງມະນຸດໃຫ້ກ້ວາງອອກຕື່ມ. ແລະອີກຢ່າງຫນຶ່ງ ການເຮັດວຽກງານຂອງເຈົ້າກໍຈະງ່າຍດາຍຂຶ້ນກ່ວາເກົ່າຖ້າຮູ້ຫລາຍພາສາ. ຂ້ອຍຊັງທີ່ສຸດຄົນປະເພດຂີ້ຄ້ານແຕ່ກິນຫລາຍນັ້ນ.

-ຄາ ພວມສອນພາສາ ອູຣະດູ ໃຫ້ຂ້ອຍ, -ຂ້າພະເຈົ້າເວົ້າ.

-ດີຫລາຍ, ແຕ່ລະເທື່ອທີ່ຂ້ອຍຄົ້ນພົບວ່າເຈົ້າຮູ້ຄວາມທ້ອງຖິ່ນຕື່ມພາສາຫນຶ່ງ, ຂ້ອຍຈະຂຶ້ນເງິນເດືອນໃຫ້ເຈົ້າຕື່ມສິບສ່ວນຮ້ອຍ. ລາຍຈ່າຍງວດນີ້ ຂ້ອຍໄດ້ຮັບຄຳສັ່ງຈາກທ່ານໂປນລິກ ແລ້ວ. ເຈົ້າຈົ່ງເຝິກຊ້ອມເວົ້າພາສາທ້ອງຖິ່ນຕ່າງໆຢູ່ໃນນິຄົມຕ່າງໆເຫລົ່ານີ້... ເອີຈະຕ້ອງ... ເຈົ້າເປັນນັກປາດຄົນຫນຶ່ງ, ສຳເລັດການສຶກສາຈາກວິທະຍາໄລ, ແລະນອກນັ້ນເຈົ້າຍັງຮູ້ຈັກວິຊາພຶດສາຊາດອີກ... -ລາວຫົວຂຶ້ນໂດຍປາສະຈາກຄຳສຽດສີໃດໆແຝງຢູ່. -ນີ້ປິນ, ຖ້າເຈົ້າຊ່ວຍໄປເຂດປູກຢາທີ່ສີ່ສິບເອັດໃຫ້ໄດ້ຈະເປັນການດີຫລາຍໃດ, ເລື່ອງນີ້ທັງມີຜົນໃຫ້ເຈົ້າ ແລະກໍມີຜົນໃຫ້ວຽກງານອີກ. ເມື່ອກ່ອນຊາວນາເຂດນັ້ນ ເຂົາເຈົ້າປູກເຂົ້າບະເລຊະນິດຫນຶ່ງຄື ບາດຍະຣາ, ເວລານີ້ພວກເຮົາປູກຢາສູບ, ເຈົ້າຈົ່ງຄົ້ນຄ້ວາເບິ່ງວ່າຢາສູບຂອງພວກເຮົາພວມພົບກັບໄພພິບັດອີສັງຢູ່ຫັ້ນ. ຄວາມຈິງແລ້ວ, ການທີ່ຂ້ອຍເອີ້ນເຈົ້າມາກໍແມ່ນຍ້ອນເລື່ອງນີ້. ຂ້ອຍຢາກຈະຫລໍ່ຫລອມເຈົ້າໃຫ້ກາຍເປັນຜູ້ບໍລິຫານນິຄົມໃດນິຄົມຫນຶ່ງໃນກຸ່ມນິຄົມຂອງພວກເຮົາໃນໂອກາດຕໍ່ໄປ. ມື້ອື່ນເຊົ້າໃຫ້ເຈົ້າໄປເລີຍເດີ. ຂ້ອຍຮູ້ວ່າມັນມີຫຍັງເກີດຂຶ້ນ, ແຕ່ເຈົ້າຈົ່ງຄົ້ນຄ້ວາເອົາເອງເບິ່ງວ່າມັນເປັນຈັ່ງໃດ ...

* * *

ຕົ້ນຢາສູບປູກເປັນແຖວຍາວຢຽດໄປທົ່ວບໍລິເວນນັ້ນ. ມັນແມ່ນຫນຶ່ງໃນບັນດາພັນຢາສູບຊັ້ນຍັຽມຂອງ ອາລັບ. ຊາວກະສິກອນເປືອຍເຄິ່ງຄີງ, ຫນັງດຳແຫ້ມແດດ ຍ້ອນກືກຈີ່ເຜົາ

ຢູ່ພາຍໃຕ້ແສງສຸລິຍັ້ນພວມບົວລະບັດຢາສູບຢູ່.    ເຂົາເຈົ້າພູນຫນານແລະຫລີກຫຍ້າເຮື້ອອອກ.

ຄົນຄຸມງານຜູ້ຫນຶ່ງ, ພາຍຫລັງທີ່ໄດ້ກວດກາເບິ່ງການເສຍຫຍ້າແລ້ວ ກໍຫັນມາຍົກມືຂຶ້ນເທິງຫນ້າຜາກແລະເອີກ   ເພື່ອທຳຄວາມເຄົາລົບຂ້າພະເຈົ້າແລະຊີ້ມືໃຫ້ຂ້າພະເຈົ້າເບິ່ງຢາສູບຫນານຫນຶ່ງ.

- ທ່ານເບິ່ງດູຫັ້ນ, ຢາສູບພວມເກີດພະຍາດ.

ແມ່ນແທ້, ຕົ້ນຢາສູບທົ່ວເຂດທີ່ສີ່ສິບເອັດ ເບິ່ງແລ້ວມັນຫນ້າສະຫລົດໃຈທີ່ສຸດ. ໃນເຂດທີ່ສີ່ສິບສອງທີ່ຢູ່ຂ້າງນັ້ນ,  ຕົ້ນຢາໄດ້ແຕກດອກແລ້ວແລະສົ່ງກິ່ນຫອມກຸບກຸ້ມຢູ່ພາຍໃຕ້ບັນຍາກາດທີ່ຮ້ອນຈັດນັ້ນ. ສ່ວນຢູ່ແຫ່ງນີ້ ຕົ້ນຢາສູບປະກົດວ່າກືກກິດໄວ້. ລວງສູງຂອງມັນໄດ້ພຽງເຄິ່ງຫນຶ່ງຂອງຕົ້ນຢາທຳມະດາເທົ່ານັ້ນ ເກືອບແມ່ນວ່າປ້າຍນ້ອຍໆທີ່ສຽບໄວ້ ເທິງຫນານນັ້ນຈະຊີ້ບອກໃຫ້ຮູ້ວ່າພວກມັນກືກປູກຂຶ້ນມາພ້ອມໆກັນກັບພວກຕົ້ນຢາຢູ່ໃນເຂດທີ່ສາມສິບແປດເກືອບສີ່ສິບຫົກກໍຕາມ. ມີພຽງບໍ່ພໍເທົ່າໃດຕົ້ນເທົ່ານັ້ນ ທີ່ພວມປົ່ງດອກອອກມາຢ່າງອ່ອນເພຍເປ້ຍລ່ອຍ.

- ເບິ່ງນີ້ດູທ່ານ, - ຄົນຄຸມງານຕັດສອງສາມໃບມາໃຫ້ຂ້າພະເຈົ້າເບິ່ງ.

ຂ້າພະເຈົ້າກວດກາເບິ່ງໃບຫຍ້າເຫລົ່ານັ້ນ. ຄົນຄຸມງານຊີ້ໃຫ້ຂ້າພະເຈົ້າເບິ່ງບ່ອນຕ່າງໆທີ່ຄວນເອົາໃຈໃສ່ຢູ່ເທິງໃບຢາເຫລົ່ານັ້ນ.   ຈະແຈ້ງວ່າບັນດາເສັ້ນເອັນຢູ່ໃນໃບຢາເຫລົ່ານັ້ນຂະຫຍາຍຕົວບໍ່ໄດ້. ດັ່ງນັ້ນ ທົ່ວທັງໃບຢາຈຶ່ງມີຮູບຮ່າງຫົດຫູ່ໄປຢ່າງແປກປະຫລາດ. ຢູ່ໃບອື່ນໆຊ້ຳເຫັນມີຮອຍກົມເປັນປ່ານໆປະກົດຂຶ້ນມາຢ່າງແຈ່ມແຈ້ງ, ນອກນັ້ນຢູ່ເທິງຫນ້າໃບຍັງປະກົດມີປ່ານສີຄ້ຳຢ່າງແປກປະຫລາດ. ຮູບຮ່າງອຸບາດທັງຫມົດເຫລົ່ານັ້ນ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ຕົ້ນຢາສູບເປັນພະຍາດ,   ບໍ່ຕ່າງຫຍັງກັບຕຸ່ມແດງໆທີ່ຟູຂຶ້ນຢູ່ບົນພິວຫນັງຂອງເດັກນ້ອຍທີ່ສະແດງວ່າມັນເປັນພະຍາດຫມາກແດງແລະພະຍາດກ່ຽວກັບເມັດເລືອດແດງ.

ແມ່ນແລ້ວ, ຕົ້ນຢາສູບເຫລົ່ານັ້ນເປັນພະຍາດຊະນິດຮ້າຍແຮງ. ຄົນຄຸມງານບອກໃຫ້ຂ້າພະເຈົ້າສັງເກດເບິ່ງລຳຕົ້ນຂອງມັນ. ມັນຕ່າງກັບລຳຕົ້ນຢາສູບທຳມະດາ,  ພວກມັນແຂງເປັນກະດັນໄປຫມົດ. ຄົນຄຸມງານໃຊ້ມີດແຫລມແທກໄປຕາມລຳຕອນປາຍຂອງຕົ້ນຢາ,  ຂ້າພະ

ເຈົ້າເຫັນເປັນປານຊ້ຳ, ເກືອບຢາກເປັນສີດຳຢູ່ເທິງເຫຍື່ອລຳຕົ້ນເພາະເຫຍື່ອຂອງມັນຕາຍໄປແລ້ວ.

ພວກເຮົາເລາະຊ້າງໄປຕາມຫນານຢາສູບຕ່າງໆ, ຢູ່ບ່ອນໃດກໍເຫັນແຕ່ພາບທີ່ຫນ້າເສົ້າໃຈຂອງຕົ້ນຢາສູບທີ່ເປັນພະຍາດແບບດຽວກັນຫລືຕົ້ນຢາທີ່ຕາຍໄປແລ້ວ. ໃບຂອງບາງຕົ້ນເຫລືອງຫລ່າໄປຫມົດ, ຫົດຫໍ່ເຂົ້າແລະເຕື່ອຍລົງຈົນຈຳດິນ ພວກມັນພວມຕາຍ, ປານວ່າມີໄຟອັນໃດອັນຫນຶ່ງພວມເຜົາມັນຢູ່ທາງໃນ. ມີຕົ້ນຢາຈຳນວນຫນຶ່ງໄດ້ ຕາຍໄປຢ່າງຮາບຄາບແລ້ວ.

ຄົນຄຸມງານແກວ່ງຫົວດ້ວຍຄວາມເສຍດາຍແລະເວົ້າກັບຂ້າພະເຈົ້າວ່າ:

- ຕົ້ນຢາສູບເຕີບໂຕຂຶ້ນມາບໍ່ໄດ້, ເສຍຫມົດ, ເຈົ້ານາຍຈະຫລຸບທຶນໃຫຍ່.

ຂ້າພະເຈົ້າເລືອກເອົາຕົ້ນຢາທີ່ເປັນພະຍາດແລະຕາຍຈຳນວນຫນຶ່ງຍັດໃສ່ກະຕ່າ, ຈົດນ້ຳເບີຫນານຕ່າງໆທີ່ມີຕົ້ນຢາເປັນພະຍາດນັ້ນໃສ່ໃນປຶ້ມບັນທຶກ. ລວມທັງຫມົດມີຈຳນວນກ່ວາສາມພັນຫ້າຮ້ອຍ. ຕົ້ນຢາພວມເຢົາຢ່າງບໍ່ຮູ້ຈັກຕົ້ນປາຍສາຍເຫດ. ແລ້ວຂ້າພະເຈົ້າກັບມາລາຍງານຕໍ່ທ່ານເວີນເຊີນ.

ບົນເສັ້ນທາງກັບມາ, ຂ້າພະເຈົ້າໄດ້ແຕ່ຄຶດເຄືອງນຳສິ່ງທີ່ໄດ້ເຫັນປະຈັກຕານັ້ນ.

ຂ້າພະເຈົ້າຍັງຈື່ບາງບົດຮຽນທີ່ຈັບໃຈຊຶ່ງຂ້າພະເຈົ້າເຄີຍໄດ້ຍິນໃນຊົ່ວໂມງຮຽນພຶດສາຊາດຢູ່ທີ່ວິທະຍາໄລ. ສົມມຸດວ່າ ຫຍ້າດອກຂາວທຸກໆເມັດຂອງແຕ່ລະຕົ້ນຫາກແຕກງອກອອກມາແລະຂະຫຍາຍຕົວຢ່າງປົກກະຕິ ແລະເປັນອິດສະຫລະ ໂດຍບໍ່ມີເງື່ອນໄຂນອກຕົວມາຈຳກັດແລ້ວ, ຫ້າປີຕໍ່ມາ, ທົ່ວທັງພື້ນແຜ່ນດິນຢູ່ເທິງໂລກຂອງພວກເຮົາກໍຈະປົກຫຸ້ມໄປດ້ວຍຕົ້ນຫຍ້າພັນດັ່ງກ່າວນັ້ນ. ໃຜໆກໍຄົງຈະເຊື່ອໃນສິ່ງນັ້ນຖ້າວ່າໄດ້ທຳການຄິດໄລ່ຢູ່ເທິງເຈ້ຍນ້ອຍໆຈັກແຜ່ນ. ການຄິດໄລ່ແມ່ນງ່າຍດາຍທີ່ສຸດ. ຕົ້ນຫຍ້າດອກຂາວກົກຫນຶ່ງຈະໃຫ້ໃນແກ່ພວກເຮົາປະມານປີລະສິບພັນເມັດ. ຫ້າປີຕໍ່ມາດ້ວຍເງື່ອນໄຂທີ່ວ່າບັນດາໃນພັນເຫລົ່ານັ້ນຫາກແຜ່ພາຍຂະຫຍາຍຕົວໄປແບບດຽວກັນ, ພວກເຮົາຈະມີກົກຫຍ້າດັ່ງກ່າວ ເກິງສິບລ້ານຕື້ຕົ້ນ. ຫນ້າພຽງຂອງຫນ້າດິນບົນພົວໂລກຂອງພວກເຮົາມີຢູ່ສາມຮ້ອຍຫົກສິບພັນຕື້ ເມັດມົນທົນ ເຊິ່ງແຕ່

ລະແມັດມົນທົນມີຄວາມອາດສາມາດໃຫ້ການເກີດແກ່ຕົ້ນໄມ້ຊະນິດນີ້ໄດ້ ບໍ່ເກີນກວ່າເຈັດສິບສອງຕົ້ນ.

ຂ້າພະເຈົ້າຈື່ໄດ້ວ່າ ໂດຍອາໄສຕົ້ນຜັກກາດຫອມ ນັ້ນ ເຂົາເຈົ້າສາມາດຈະກຳນົດທິດທັງສີ່ໄດ້. ຜັກກາດຫອມ ເປັນຕົ້ນໄມ້ທີ່ມີລັກສະນະຄືເຂັມຊີ້ທິດຊະນິດໜຶ່ງ. ມັນມີຮູບຮ່າງຄ້າຍກັບວ່າເຂົາເຈົ້າຕັ້ງແກ້ງປັ້ນແຕ່ງມັນຂຶ້ນມາແບບນັ້ນ ເພື່ອຈະເອົາມາຕິດໃສ່ໃບເຈ້ຍແລ້ວໜີບປະໄວ້ໃຫ້ແຫ້ງເພື່ອທຳເປັນຕົວຢ່າງ. ໜ້າພຽງຂອງໃບຜັກກາດຫອມ ຍາມໃດກໍນອນລອຍຢູ່ຕາມເສັ້ນແບ່ງແຕ່ເໜືອລົງໃຕ້.

ແຕ່ໃນບົດຮຽນຕ່າງໆທີ່ກ່ຽວກັບພຶດສາຊາດນັ້ນ ເຂົາເຈົ້າຊໍ້າບໍ່ໄດ້ເອີ່ຍເຖິງພະຍາດບາດເຍົາຕ່າງໆຂອງພືດສາຊາດເລີຍ. ຍ້ອນແນວນັ້ນ ການທີ່ ຂ້າພະເຈົ້າລໍຄອຍດ້ວຍຄວາມຮ້ອນອົກຮ້ອນໃຈວ່າ ທ່ານ ເວີນເຊີນ ຈະເວົ້າຫຍັງຫລັງຈາກທີ່ຟັງລາຍງານຂອງຂ້າພະເຈົ້ານັ້ນ ຈຶ່ງບໍ່ມີຫຍັງຈະເປັນສິ່ງແປກປະຫລາດ.

- ຄັນຊັ້ນເຈົ້າຍັງບໍ່ທັນໄດ້ຮຽນບັນຫານີ້ຫວະ? ແລະເຈົ້າກໍບໍ່ຮູ້ວ່າ ອັນນັ້ນມັນເປັນຈັ່ງໃດຊັ້ນຫວະ? ນິປັນ, ນິເດີ: ຢາສູບຢູ່ໃນເຂດສີ່ສິບເອັດເປັນພະຍາດກະດັນຕາບົ້ງ. ກຳມະກອນກືກຫ້າມບໍ່ໃຫ້ໃຊ້ມີດຕັດທີ່ໃຊ້ຕັດໃບຂອງຕົ້ນເປັນພະຍາດນັ້ນໄປຕັດໃບຂອງຕົ້ນທີ່ຍັງດີຢູ່. ປານນັ້ນ, ພໍແຕ່ຄົນຄຸມງານອວ່າຍໜ້າໄປຫາວເທົ່ານັ້ນ ພວກເຂົາກໍເຮັດໄປຕາມໃຈເຂົາໂລດ.

- ແຕ່ມີດຕັດຊິມີຫຍັງກ່ຽວພັນເຖິງເລື່ອງນີ້?... - ຂ້າພະເຈົ້າຖາມ.

ທ່ານ ເວີນເຊີນ ຕັດບົດຂອງຂ້າພະເຈົ້າ:

- ເຊື້ອໂລກຂອງຕົ້ນທີ່ເປັນພະຍາດກະດັນຕາບົ້ງສາມາດຕິດແປດກັນໄດ້. ມີດຕັດສາມາດສົ່ງເຊື້ອວິຣຸດຈາກຕົ້ນຢາທີ່ເປັນພະຍາດກະດັນຕາບົ້ງໄປຍັງຕົ້ນທີ່ຍັງດີຢູ່. ວິຣຸດ ແມ່ນຫຍັງ, ບາງທີກໍຍັງບໍ່ທັນມີໃຜຮູ້ຈະແຈ້ງດອກ. ນັ້ນແມ່ນຊື່ທາງວິທະຍາສາດຢ່າງໜຶ່ງ. ຕາມຄວາມໝາຍຂອງພາສາລາຕິນແລ້ວ, ວິຣຸດ ແມ່ນພິດເບື່ອ - ເວົ້າທົ່ວໄປແລ້ວມັນຄືບໍ່ເກີດແຫ່ງການສົ່ງພະຍາດຕິດແປດຊະນິດໜຶ່ງ. ທ່ານ ອີວານົບສະກີ ຢູ່ປະເທດລັດເຊຍທີ່ກວາງໄກ ໄດ້ຄົ້ນພົບວິຣຸດຂອງພະຍາດກະດັນຕາບົ້ງຂອງຕົ້ນຢາສູບ. ນັ້ນຄືສິ່ງທັງໝົດທີ່ຂ້ອຍຮູ້ຈັກ. ໃນຫ້ອງທົດລອງຕ່າງໆຂອງອິນເດຍ ບ່ອນເຊິ່ງພວມທຳການຄົ້ນຄ້ວາພະຍາດອັນນີ້, ເຊິ່ງມັນໄດ້ນຳ

ພົນເສຍຫາຍອັນໃຫຍ່ຫລວງບໍ່ຈັກວ່າເທົ່າໃດມາສູ່ບັນດານິຄົມປູກຢານັ້ນ, ເຂົາເຈົ້າລ້ວນແຕ່ຮູ້ຈັກຊື່ສຽງລຽງນາມຂອງ ອີວານົບສະກີ ໄດ້ດີ. ເຈົ້າລອງຄົ້ນເບິ່ງດູວ່າ, ຍ້ອນພະຍາດກະດັນຕາບັ້ງນັ້ນ ສະມັດຕະພາບແລະຄຸນນະພາບຂອງຢາສູບໄດ້ຫລຸດຜ່ອນລົງ. ໃບຢາຕ່າງໆທີ່ເປັນພະຍາດນັ້ນ ລ້ວນແຕ່ກາຍເປັນຜະລິດຕະພົນທີ່ເສື່ອມຄຸນນະພາບ, ໃຊ້ເຂົ້າໃນການຜະລິດບໍ່ໄດ້.

-ໂອ, ເປັນຈັ່ງຊັ້ນເນາະ! ຍ້ອນຄວາມປະທັບໃຈຕໍ່ຄຳອະທິບາຍຂອງເວິນເຊີນ, ຂ້າພະເຈົ້າຈຶ່ງຫລົງເວົ້າຫລຸດປາກອອກມາ.

-ແມ່ນແລ້ວ, ບີນ, ຖ້າເຈົ້າບໍ່ຢາກນັ່ງເບື່ອຫນ່າຍຢູ່ກັບສະຫມຸດຄິດໄລ່ຕ່າງໆໃນຫ້ອງການແລ້ວ, ຈົ່ງເອົາໃຈໃສ່ສັງເກດການເບິ່ງວຽກງານຕ່າງໆຢູ່ໃນນິຄົມ. ເພື່ອນຄາຂອງເຈົ້າມັກແຕ່ນັ່ງຢູ່ໃນໂຕະຫ້ອງການເທົ່ານັ້ນ. ຊ່າງຫົວລາວ ການປະຕິບັດງານຂອງເຈົ້າຢູ່ນິຄົມມື້ນີ້ ສ້າງຄວາມພໍໃຈໃຫ້ຂ້ອຍຫລາຍ. ເຂົາເຈົ້າເລົ່າໃຫ້ຂ້ອຍຟັງແລ້ວ. ດັ່ງນັ້ນປະຈຸບັນນີ້ ເຈົ້າຈົ່ງເລືອກເອົາຄົນຈັກສາມສິບຄົນ ແລ້ວພາພວກເຂົາໄປບ່ອນຫັ້ນ. ເຈົ້າຈົ່ງບັນຊາເຂົາເຈົ້າຫລົກຕົ້ນຢາທັງຫມົດທີ່ເປັນພະຍາດນັ້ນອອກແລ້ວຈູດກຸ້ມ. ຈະຕ້ອງດັບສູນແຫລ່ງພະຍາດຕິດແປດແຕ່ຫົວທີ. ເຈົ້າຫາລະຕຳນິຄົນຄຸມງານໄດ້ຕາມໃຈຊອບ. ຂ້ອຍຈະລົງໂທດຜູ້ມີຄວາມຜິດເອງ. ນອກນັ້ນຂ້ອຍຈະຂຽນຈົດຫມາຍໄປຫາທ່ານ ໂປນລົກ ເພື່ອໃຫ້ເພິ່ນລາຍງານໄປຍັງຫ້ອງທົດລອງວິຣຸດທີ່ ການກຸດຕານຳ.

## IV

ຕອນທ່ຽງ, ສັດສາວາສິ່ງທຸກໂຕຢູ່ໃນນິຄົມຢານັ້ນ ລ້ວນແຕ່ຫລົບຫລີກໄປຈາກແສງແດດອັນຮ້ອນຈັດຂອງດວງອາທິດແຫ່ງອິນເດຍ. ຕົ້ນໄມ້ໃບຫຍ້າຕ່າງໆ ລ້ວນແຕ່ປະຕິເສດການສ່າຍເງົາອອກມາ ເພາະແສງແດດໄດ້ສ່ອງແສງທັ່ງຊື່ງລົງສູ່ຫນ້າດິນ. ຂ້າພະເຈົ້ານອນຢູ່ໃນສາລານ້ອຍຫລັງຫນຶ່ງ ເຊິ່ງເຮັດດ້ວຍໄມ້ປ່ອງຢູ່ແຄມປ່າຄໍ້ແລະລຳກ້າໃຫ້ຕາເວັນບ່າຍ.

ກະສິກອນໄດ້ໄກບໍລິເວນປູກຕົ້ນຢາທີ່ເສຍຫາຍນັ້ນສຳເລັດລົງໄປແລ້ວ ແລະໄດ້ກັບມາ

ພັກຜ່ອນຢູ່ໃນຕູບ.    ຂ້າພະເຈົ້າໄດ້ທຳຄວາມລຶ້ງເຄີຍກັບຫລາຍໆຄົນໃນຫມູ່ກະສິກອນນັ້ນ, ແລະເຂົາເຈົ້າກໍພ້ອມແລ້ວທີ່ຈະເລົ່າຂ່າວໃຫມ່ໆໃນທ້ອງຖິ່ນສູ່ຂ້າພະເຈົ້າຟັງ. ມໍ່ໆນີ້, ຈະມີພະທີ່ໄດ້ຮັບຄວາມເຄົາລົບນັບຖືສອງອົງຈາກພາລານະສີ ມາຍັງຫມູ່ບ້ານຕ່າງໆໃນບໍລິເວນນີ້. ຊາວນາພວມກຽມສ້າງວັດຫລັງຫນຶ່ງທີ່ຝັ່ງເຊ ເພື່ອບູຊາຫະນຸມານ ເຊິ່ງເປັນເທວະອົງຫນຶ່ງທີ່ມີຫົວເປັນລິງ. ມີຄົນຜູ້ຫນຶ່ງມາບ້ານ ຮັງເບຍ ເພື່ອຊອກຈ້າງ ກະສິກອນໄປໃຫ້ແກ່ໂຮງງານ, ແຕ່ຊາວນາໃນບ້ານດັ່ງກ່າວບໍ່ຢາກປ່ອຍວຽກວາງງານຂອງນິຄົມໄປ ເພາະທ່ານ ເວີນເຊີນ ຈ່າຍເງິນຄ່າແຮງງານດີ.

ຂ້າພະເຈົ້າຊື່ນຊົມນຳຄົນເຫລົ່ານີ້ຍິ່ງ. ແລະຂ້າພະເຈົ້າກໍບໍ່ຊາບວ່າເຫດໃດ ດະຍົມຄາ ຈຶ່ງມີທຸກຂະທັດກັບຊີວິດຢູ່ແຫ່ງນີ້. ຂ້າພະເຈົ້າແນມອອກໄປຍັງຫົນທາງທີ່ເນັ່ງຍຽດຢູ່ນອກຮົ້ວ. ຂ້າພະເຈົ້າເຫັນແຊັກນາກ ພວມຂີ່ມ້ານ້ອຍມຸ່ງຫນ້າໄປທາງຫມູ່ບ້ານ ຮັງເບຍ. ຫມໍນຸ່ງເສື້ອຍາວດຳ, ສົ້ງສີແດງກວ້າງໆແລະຮັດແອວດ້ວຍຜ້າແພໄຫມສີແສດມີແຊກສີຄຳ. ຫມໍເອົາແພພັນຫົວ, ສ່ວນນິ້ວມືນັ້ນ ກໍສວມແຫວນເງິນຫນາໆຢູ່ຫລາຍວົງ. ຕີນສົ້ນຫມຸດລຸດຂອງຫມໍໃສ່ເກີບສີເຫລືອງ, ຢຽດຂາສອງຂ້າງລົງຊື່ໆ. ແຊັກນາກ ໃຊ້ສົ້ນເກີບທັງສອງເຕາະໆໃສ່ສີຂ້າງທີ່ເຄັ່ງອົ້ງຕົ້ງຂອງມ້ານ້ອຍໂຕນັ້ນ.

ແລະພຸ້ນ, ແມ່ຍິງຜູ້ຫນຶ່ງຫນັງແຫ້ມແດດ ພວມໄປຫາບນ້ຳ, ເດັກນ້ອຍສອງຄົນ ໄຫ້ຍ່ວຂຶ້ນ. ແລະຈ່ອງເສື້ອຂອງນາງໄປນຳ.

ພຸ້ນອີກ, ຄົນຜູ້ຫນຶ່ງພວມຂີ່ມ້າມາ. ເຜດມຶງເອີຍ, ດະຍົມຄາ ຕ່ວາຫັ້ນ! ເປັນຫຍັງຫມໍບໍ່ຢູ່ຫ້ອງການພຸ້ນ, ເປັນຫຍັງຈຶ່ງມານີ້, ມາຫານິຄົມບໍ່ຖືກເມື່ອກຶກຍາມແນວນີ້? ແນ່ນອນວ່າຫມໍພວມຊອກຫາຂ້າພະເຈົ້າ. ມີເລື່ອງຫຍັງເກີດຂຶ້ນຈຶ່ງເຮັດໃຫ້ຫມໍສູນວິດໆມາພົບ?

ທ່ານ ເວີນເຊີນຖືວ່າ ຄາເປັນເພື່ອນຂອງຂ້າພະເຈົ້າ. ຄວາມຈິງກໍແມ່ນແນວນັ້ນແທ້. ຂ້າພະເຈົ້າຕິດພັນກັບຄົນຜູ້ວ່ອງໄວແລະເວົ້າຈາຮຸນແຮງຄົນນັ້ນ. ນອກນັ້ນ ຂ້າພະເຈົ້າຍັງຮູ້ສຶກອີ່ຕົນຫມໍ ດະຍົມ ພວມມີເລື່ອງບໍ່ລ່ອງກັບທ່ານ ເວີນເຊີນ, ຍ້ອນແນວນັ້ນ, ອຸປະນິດໃສທີ່ບໍ່ຄ່ອຍຈະສົດຊື່ນລື່ນເລີງຂອງຫມໍ, ໃນມໍ່ໆມານີ້ ກໍຍິ່ງໂສກເສົ້າຫງອຍເຫງົາລົງໄປຕື່ມ.

ພາຍຫລັງການໄປນິຄົມຄັ້ງທຳອິດຂອງຂ້າພະເຈົ້າ, ໃນຂະນະທີ່ຂ້າພະເຈົ້ານັ່ງກັບເຂົາເຫົງ

ລະບຽງແນມເບິ່ງດວງອາທິດພວມອັດສະດົງທີ່ສ່ອງລັດສະໝີສີທອງລົງສູ່ຍອດຄົ້ນນັ້ນ, ດະຍິມເວົ້າກັບຂ້າພະເຈົ້າແບບເຢາະເຢີ້ຍວ່າ:

- ໂຕກາຍເປັນຜູ້ທີ່ເວີນເຊີນໃຫ້ຄວາມຮັກແພງ, ແຕ່ເຮົາກໍບໍ່ໄດ້ອິດສາຫຍັງໂຕເລີຍ, ປີນເອີຍ. ຫາກແມ່ນເຮົາເປັນໂຕ, ເຮົາຈະພະຍາຍາມຫລົບຫນີໄປຈາກເຂດຜີບໍ່ທ່ອງຄົນບໍ່ຫງວນີ້ແລ້ວ. ເຮົາເບື່ອບ່ອນນີ້ຫລາຍ. ເວີນເຊີນປະພຶດບໍ່ດີຕໍ່ເຮົາ. ເຂົາເປັນຄົນຫຍາບຊ້າ, ເຮົາທົນຕໍ່ຄຳປາກຄຳເວົ້າຂອງຫມໍບໍ່ໄດ້. ບໍ່ເທື່ອໃດກໍເທື່ອຫນຶ່ງດອກຫາກຫມໍເຮັດໃຫ້ເຮົາເລືອດຂຶ້ນຫນ້າມື້ໃດ ເຮົາຊິເຮັດໃຫ້ຫມໍເຫັນລິດເບິ່ງ.

ເມື່ອຮູ້ຈັກນິດໃສໃຈຄໍຂອງ ດະຍິມ ເປັນແບບນັ້ນແລ້ວ, ຂ້າພະເຈົ້າ ກໍວິຕົກນຳເພື່ອນຜູ້ໃຈຮ້ອນແລະມັກກະວຶດກະວື່ຜູ້ນີ້ຂອງຂ້າພະເຈົ້າ. ພຸດໂທເອີຍ, ຂ້າພະເຈົ້າຍັງຢັ່ງຮູ້ໃຈມະນຸດນ້ອຍເກີນໄປ.

ແລະປະຈຸບັນນີ້, ຂ້າພະເຈົ້າພວມນັ່ງເບິ່ງການກັບມາຂອງດະຍິມ ດ້ວຍຄວາມວິຕົກກັງວົນ.

- ມີເລື່ອງຫຍັງຫວະ, ດະຍິມ? ເບິ່ງເຈົ້າຄືຈັ່ງວ່າອາລົມບໍ່ດີ.

- ຂ້ອຍຊິຫນີຈາກນີ້, - ຄາປະກາດອອກມາທັນທີ. - ເຮົາດ່າກັນກັບ ເວີນເຊີນຢ່າງຮຸນແຮງ. ເພື່ອຕອບແທນຄຳສັງເກດການອັນຖືກຕ້ອງຂອງເຮົາຕໍ່ການປະຕິບັດວຽກງານນັ້ນ, ຫມໍເອີ້ນເຮົາວ່າເປັນບັກຂຽດນ້ອຍທີ່ໄຮ້ການສຶກສາ.

ຂ້າພະເຈົ້າຫືນຂຶ້ນ. ເວີນເຊີນ ຍາມໃດກໍປະພຶດດີວສຸພາບກັບຂ້າພະເຈົ້າ. ມັນເປັນທີ່ແຈ້ງຂາວແລ້ວວ່າໃບປະກາດສະນິຍະບັດຂອງຂ້າພະເຈົ້າມີຄຸນຄ່າຕໍ່ຫມໍ. ແຕ່ເຖິງແມ່ນວ່າ ດະຍິມຄາ ຈະບໍ່ມີໂອກາດໄດ້ຮ່ຳຮຽນຢ່າງພຽງພໍ ແຕ່ກໍບໍ່ແມ່ນເລື່ອງທີ່ອີຕາເກົ້າ ເວີນເຊີນດູ້ຍມຸດຫລຸດແລະມັກຂົ່ມເພິ່ນຍໍໂຕນັ້ນ ມີສິດຫມິ່ນປະຫມາດເຂົາ.

- ແບບນັ້ນ ມັນກໍອັບປີທີ່ສຸດແລ້ວ! ຄາເອີຍ, ເຮົາເຂົ້າໃຈເຈົ້າດີ. ແຕ່ໂຕກະວ່າຊິໄປໃສລະ?

- ໄປໃສຊິບໍ່ໄດ້, ສະເພາະເຮົາຊ່ຳນັ້ນພໍແລ້ວ. ເຮົາພວມຂໍລາອອກການ. ເຮົາເວົ້າແດກໃສ່ຫນ້າເວີນເຊີນ ແລ້ວ. ມີແຕ່ວ່າເຮົາຢາກເຮັດໃຫ້ຫມໍເຂັດຫລາບຈັກບາດ. ກ້າວ່າບໍ່ມີແຕ່ເຮົາຜູ້ດຽວຫນີໄປແລ້ວຄັກທີ່ສຸດ! ກ້າໂຕເປັນເພື່ອນຂອງເຮົາ ກໍຈັ່ງສະຫນັບສະຫນູນເຮົາ.

ຂ້າພະເຈົ້າສົງສານ ຄາທີ່ສຸດ. ເບິ່ງເຂົາຄົງຈະລຳບາກໃຈຫລາຍ ແລະນອກຈາກນັ້ນຄວາມຫຍາບຊ້າຂອງຜູ້ບໍລິຫານນິຄົມກໍຍັງເຮັດໃຫ້ຂ້າພະເຈົ້າລັງກຽດເຂົາຕື່ມອີກ.

ຂ້າພະເຈົ້າຈັບມື ດະຍິມ ຢ່າງງຽບໆ.

ຕອນເຊົ້າມື້ຕໍ່ມາ, ຂ້າພະເຈົ້າກໍໄປປະກາດກັບ ເວິນເຊິນ ວ່າຂ້າພະເຈົ້າຂໍລາອອກການ. ຄົນຮ່າງໃຫຍ່ຕຸ້ຍຜູ້ນັ້ນແປກປະຫລາດ, ເຂົາຫຍິກບ່າ ແລ້ວເວົ້າແບບຂົ່ມໃຈຕົນເອງວ່າ:

- ສຸດແລ້ວແຕ່ເຈົ້າ...

ຕົກຕອນຄ່ຳ ຂ້າພະເຈົ້າກໍໄດ້ຂ່າວໃຫ້ດະຍິມຮູ້ຈັກກ່ຽວກັບບັນຫານີ້. ເຂົາຂອບໃຈນຳຂ້າພະເຈົ້າຄັ້ງແລ້ວຄັ້ງເລົ່າ.

- ບິນເອີຍ, ໂຕເປັນເພື່ອນແທ້ຜູ້ຫນຶ່ງ, ເຮົາເບິ່ງບໍ່ຜິດເລີຍ. ໂຕເກັ່ງຫລາຍ. ເຊົ້າມື້ອື່ນພວກເຮົາຈະພ້ອມກັນອອກເດີນທາງໄປຊອກຫາຄວາມສຸກ.

ແຕ່, ມື້ຕໍ່ມາ ຂ້າພະເຈົ້າຊອກຄາຢູ່ເຮືອນບໍ່ພົບເລີຍ. ພວກກຳມະກອນເວົ້າວ່າລາວໄປຮັງເບຍ. ຂ້າພະເຈົ້າຫົວຫົບແລ້ວເບັດຫນ້າໄປຍັງແຫ່ງນັ້ນ, ໂດຍຫວັງວ່າຈະໄດ້ພົບລາວຢູ່ເທິງທາງລົດໃກ້ກັບຄິວລົດໂອໂຕໄປສະນີ. ຂ້າພະເຈົ້າຖ້າ ດະຍິມຢູ່ຫັ້ນບັກດົນໆ ແລະຮູ້ສຶກຮ້ອນອົກຮ້ອນໃຈຂຶ້ນມາ. ໃນທີ່ສຸດຄາກໍມາເຖິງ, ແຕ່ບໍ່ຖືເຄື່ອງຂອງຫຍັງມານຳເລີຍ, ເຂົາຍິ້ມຫົວ ດ້ວຍທ່າທາງດີອົກດີໃຈ.

ເຂົາເວົ້າດ້ວຍນ້ຳສຽງອັນອ່ອນຫວານສຸດຂີດ:

- ເຮົາຟ້າວມາບອກໃຫ້ໂຕຮູ້ວ່າ ລົດຈະມາເຖິງນີ້ຊ້າກວ່າປົກກະຕິສອງຊົ່ວໂມງ. ແຊັດນາກເວົ້າ. ຈັ່ງຊີ້ນຳເຮົາໂຕຮູ້ບໍ່, ເຮົາຫາກໍທຳຄວາມເຂົ້າໃຈກັນກັບອີຕາ ເວິນເຊິນນັ້ນໄດ້. ຫມໍຂໍຮ້ອງໃຫ້ເຮົາຄຸ້ມຄອງນິຄົມແຫ່ງຫນຶ່ງ, ແລະເຮົາກໍຮັບປາກວ່າຈະຢູ່ນີ້ຕໍ່ໄປ. ໂຕອົດສາໄປຜູ້ດຽວສາ...

ຂ້າພະເຈົ້າຍິ້ມຫົວແລະແນມເບິ່ງຫນ້າບັກຄົນຫລອກລວງຜູ້ນີ້ຢ່າງເຕັມຕາ.

- ຄາ, ໂຕປັດເຂ່ຍຄູ່ແຂ່ງຂອງໂຕອອກໄປຈາກເສັ້ນທາງທຳມາຫາກິນໄດ້ຢ່າງຄ່ອງແຄ້ວ. ດຽວນີ້ ເຮົາແນມເຫັນຕັບໄຕໄສ້ອ່ອນຂອງໂຕແລ້ວ, ວິນຍານຂອງໂຕມັນເຕັມແຕ່ຄວາມອິດສາຕາຮ້ອນ, ແລະມັນພວມຕິດເຊື້ອພະຍາດຫລອກລວງ.

ເຂົາກຸງຄືນ, ແຕ່ຂ້າພະເຈົ້າຕັດຄວາມເຂົາຢ່າງແຂງກະດ້າງ:

- ທ່ານເອີຍ, ເຮົາເບື່ອຫນ່າຍທີ່ສຸດແລ້ວ. ເຮົາບໍ່ຕ້ອງການເສຍນ້ຳລາຍກັບທ່ານອີກແລ້ວ.

ພໍຂ້າພະເຈົ້າອວ່າຍຫນ້າອອກໄປແລ້ວ ຄາກໍກັບສູ່ເຂດນິຄົມ ວາຄຣາດ.

V

ຂ້າພະເຈົ້າບໍ່ກ້າລົດໂອໂດແລະກໍບໍ່ຍອມກັບສູ່ຕົວເມືອງອີກ. ຂ້າພະເຈົ້າຍ່າງມຸ້ງຫນ້າໄປຍັງທິດບູລະພາ, ສູ່ປະເທດພະມ້າ ເພື່ອຈະໄດ້ຮູ້ຊີວິດຕົວຈິງຢູ່ແຫ່ງນັ້ນຢ່າງລະອຽດກ່ວາເກົ່າ. ປ່າຕຶບດົງຫນາ, ເສືອສາງຊ້າງເຖື່ອນບໍ່ອາດຈະສ້າງຄວາມເກງກົວໃຫ້ແກ່ຂ້າພະເຈົ້າໄດ້. ທີ່ວາຄຣາດ, ຂ້າພະເຈົ້າໄດ້ເຫັນແຈ້ງແລ້ວວ່າ ມະນຸດຍັງໂລບລັງວໂລພາ, ສາໂຫດສາມານໄປກວ່າເສືອສາງຊ້າງເຖື່ອນຕັ້ງຫລາຍເທົ່າ.

ຊາວຕາເວັນອອກມີນ້ຳໃຈຮັກແຂກກະຫນອມຄົນເປັນພິເສດ, ເຂົາເຈົ້າປະພຶດດີຕໍ່ຂ້າພະເຈົ້າທັນທີ ເມື່ອຮູ້ວ່າຂ້າພະເຈົ້າບໍ່ແມ່ນຄົນໄປເກັບສ່ວຍສາອາກອນ. ຂ້າພະເຈົ້າຍັງຄຶດເຫັນພາບທົ່ງນານ້ອຍແຫ່ງຫນຶ່ງທີ່ປູກເຂົ້າແລະຕົ້ນພ້າວຈຳນວນຫນຶ່ງ ທີ່ຢືນນິ້ງຄວນຄຶດຢູ່ບົນພົງໄພປ່າໄມ້ຂອງເຂດອາກາດຮ້ອນ. ຢູ່ແຫ່ງນັ້ນມີເຮືອນຊາວນາຫລັງຫນຶ່ງງາມຄືຮູບແຕ້ມ. ຂ້າພະເຈົ້າໄປຂໍນ້ຳມາກິນ. ເຈົ້າຂອງເຮືອນເວົ້າອອກມາດ້ວຍຄວາມຮັກແພງວ່າ:

- ໄດ້ ຂ້ອຍຈະລ້ຽງເຈົ້າ.

ລາວຊີ້ໃສ່ປາຍພ້າວທີ່ຫນັກຕຶ້ງໄປດ້ວຍຫມາກພ້າວຫນ່ວຍໃຫຍ່ໆຄືນ້ຳເຕົ້າກາ.

ຂ້າພະເຈົ້າຄຶດ: ສູງປານນັ້ນເຮັດຈັ່ງໃດລາວຊິເອົາໄດ້?

ແຕ່ພໍລາວກືວປາກອອກມາບາດຫນຶ່ງຄ່ອຍໆ ກໍປະກົດມີລິງໃຫຍ່ດ້າງຍາວໂຕຫນຶ່ງໂດດພົບແຕ່ຫລັງຄາເຮືອນລົງມາສູ່ດິນ. ຜູ້ເຈົ້າຂອງມັນຊີ້ມືອອກຄຳສັ່ງ ແລ້ວເວົ້າອີສັງສອງສາມຄຳອອກມາ. ລິງຕົວນັ້ນກໍໂດດຂຶ້ນກົກໄມ້ທີ່ບັກເປັນລາຍກ່ານແລະເບິ້ງນັ້ນໄວປານສາຍຟ້າແລບ.

- ພວກເຮົາມໍ່ຈະໄດ້ກິນຂອງຫວານແລ້ວ - ເຈົ້າຂອງເວົ້າແລະຍິ້ມຫົວ.

ຂ້າພະເຈົ້າແຫງນເບິ່ງລີງທີ່ຖືກໃຊ້ຂຶ້ນເມືອນັ້ນວ່າມັນພວມເຮັດຫຍັງຢູ່. ແຕ່ກໍຫນ້າແປກ, ມັນບໍ່ໄດ້ຄຶດເຖິງເລື່ອງທີ່ຈະປິດຫມາກພ້າວນັ້ນເລີຍ. ມັນນັ່ງເສີຍເມີຍຢູ່ເທິງປາຍໄມ້ແລະພວມພີ່ຂົນຈັບເຫົາເກົາຫມັດເສີຍຢູ່, ແລະບໍ່ສົນໃຈຫຍັງກັບພວກຂ້າພະເຈົ້າເລີຍ.

- ມັນບໍ່ມັກຟັງຄວາມ, - ຜູ້ເປັນເຈົ້າຂອງເວົ້າຄືກັບຢາກຂໍໂທດແລ້ວແຜດໃສ່ລີງ: - ບາດຕູ... ບາດຕູ... ໄວແນ່ດີ!

ລີງຄືງຈັບຫມັດຢູ່ຢ່າງເມົາມົວ. ມັນໃຊ້ແຂ້ວແຫລມງນັ້ນຫຍໍ້າຫມັດຂະຫຍັກງແລ້ວກິ້ມລີງໃສ່ພວກຂ້າພະເຈົ້າ.

ເຈົ້າຂອງຈະຮ້ອງແຜດຈັ່ງໃດມັນກໍບໍ່ສົນ. ຂ້າພະເຈົ້າກະວ່າຈະໄລ່ລີງ ບາດຕູ ຈຶ່ງປົດຫມວກອອກມາແລ້ວແກວ່ງຂຶ້ນ. ບາດຕູແນມເບິ່ງຢ່າງຈິດຈໍ່ແລ້ວ ຫຍິ່ງແຂ້ວອອກຄືຫົວ. ຂ້າພະເຈົ້າແກວ່ງຂຶ້ນເປັນຄັ້ງທີ່ສອງ. ມັນຕິດຕາມເບິ່ງຫມວກແລ້ວ ສັກຂະໂຍງຂຶ້ນຢ່າງກະທັນຫັນ, ປົດເອົາຫມາກພ້າວໃຫຍ່ຫນ່ວຍຫນຶ່ງ ແລ້ວໂຍນຂຶ້ນຫມົດແຮງ.

ດີແຕ່ຂ້າພະເຈົ້າຫລົບທັນ, ດັ່ງນັ້ນ ຈຶ່ງລອດພົ້ນຈາກລູກມະຫາໄພທີ່ສາມາດເຮັດໃຫ້ຫົວຄົນແຫລກມຸ່ນໄປນັ້ນໄດ້. ສ່ວນເຈົ້າຂອງເຮືອນນັ້ນທັນຫລົບເຂົ້າໄປຢູ່ກ້ອງຫລັງຄາເຮືອນ.

ທັນໃດນັ້ນ ບາດຕູ ກໍຄຶດສະເດືອກເຖິງຫນ້າທີ່ຂອງຕົນ, ມັນຄານລົງມາ, ເອົາຫມາກພ້າວຫນ່ວຍຫນຶ່ງມາພ້ອມແລ້ວເອົາໄປວາງໄວ້ຂ້າງບານປະຕູ.

ເຈົ້າຂອງໃຊ້ເຫລັກແຫລມແທງທະລຸເປືອກບ່ອນຫນຶ່ງເຂົ້າໄປ, ຈາກນັ້ນກໍລິນນໍ້າຫມາກພ້າວທີ່ຫວານເຢັນນັ້ນລົງໃສ່ກ້ອຍແລ້ວ ເຊີນຂ້າພະເຈົ້າດື່ມ. ຫລັງຈາກນັ້ນ ລາວກໍຕອກໄມ້ຫລິ້ມເຂົ້າໃສ່ຮອຍໂປດ, ງັດຫມາກພ້າວໃຫ້ແຕກເຄິ່ງອອກມາ. ນວນຂອງຫມາກພ້າວຂາວສະອາດເບິ່ງແລ້ວເປັນຕາແຊບ. ຂ້າພະເຈົ້າມີໂອກາດໄດ້ຊີມລົດຊາດອາຫານພິເສດຈາກເຂດຮ້ອນຈັດນັ້ນຢ່າງສົມໃຈ ບາດຕູ ກໍໄດ້ສ່ວນແບ່ງຄືກັນ, ມັນກືແລ່ນຂຶ້ນເມືອຫລັງຄາເຮືອນພຸ້ນໂລດ.

* * *

ຂ້າພະເຈົ້າແປກໃຈບໍ່ເລີກບໍ່ແລ້ວ ບໍ່ຮູ້ວ່າຍ້ອນເຫດໃດ ໂຊກຊາຕາຈຶ່ງກອກເທການພະຈົນໄພຫລາຍຢ່າງຕ່າງກັນລົງໃສ່ຫົວຄົນຜູ້ຫນຶ່ງຢ່າງໃຈກ້ວາງໃຈຂວາງເອົາແທ້ເອົາວ່າ, ພ້ອມ

ກັນນັ້ນ ກໍປ່ອຍປະໃຫ້ຜູ້ອື່ນໆໄດ້ດຳລົງຊີວິດຢູ່ຢ່າງຊືມເສົ້າແລະງຽບເຫງົາ. ຄວາມຈິງແລ້ວ ການຕີລັງກາປິ່ນປີ້ນຄັ້ງຕ່າງໆຢູ່ເທິງເວທີສະແດງຂອງໂຮງກາຍຍະສິນແລະການຫມົ້ນປ່າຜ່າດົງຕ່າງໆນາໆເຫລົ່ານັ້ນໃນໄລຍະທີ່ຜ່ານມາ ມັນເປັນພຽງແຕ່ເລື່ອງຂີ້ຝອຍຖ້າທຽບກັບສິ່ງທີ່ລໍຖ້າຂ້າພະເຈົ້າຢູ່ໃນອະນາຄົດ.

ໃນລະຫວ່າງການທ່ອງທ່ຽວທາງຍ່າງນັ້ນ ບາງຄັ້ງຄາວຂ້າພະເຈົ້າຈຳເປັນຕ້ອງຂໍພັກເຊົາຢູ່ຊົ່ວຄາວໃນເຮືອນຂອງຊາວນາຕາມບ້ານຕ່າງໆ, ແລະໄດ້ລຶ້ງເຄີຍກັບການ "ນອນຄວາຍ" ຢູ່ເທິງດິນ ແລະພໍໃຈກັບການກິນເຂົ້າສາລີຕາງເຂົ້າສວາຍນັ້ນແລ້ວ. ບາງຄັ້ງຄາວ ຂ້າພະເຈົ້າຍັງຕ້ອງໄດ້ພັກແຮມຄືນຢູ່ກາງແຈ້ງອີກເສຍດ້ວຍ.

ມີເທື່ອຫນຶ່ງ ຂ້າພະເຈົ້າຫລົງທາງ ແລະບໍ່ສາມາດຈະຊອກຫາຫມູ່ບ້ານທີ່ເຂົາເຈົ້າບອກໃຫ້ຮູ້ນັ້ນໄດ້. ຍ້ອນເມື່ອຍໂພດ, ຂ້າພະເຈົ້າລົ້ມອ່ອນແອກແຫຼກລົງໃສ່ຫນ້າທາງປູຫີນແຮ່ແລ້ວກໍນອນຢູ່ຫັ້ນ ທັງຮູ້ສຶກເປັນຫ່ວງຕໍ່ການເພຍແຮງຢ່າງຫນ້າວິຕົກຂອງຕົນ. ນ້ຳຢູ່ໃນເຕົ້າກໍຍັງເຫລືອພຽງແຕ່ສອງກືນເທົ່ານັ້ນ.

ມົດສີຂຽວໃຫຍ່ໂຕຫນຶ່ງທັງເຫລືອດຕາສີຄາມຊຸ່ນທັງຄານມາຕາມຫນ້າດິນ ແທ້ງກະແດ້ງມຸ່ງເຂົ້າມາຫາຂ້າພະເຈົ້າເພື່ອຈະຂົບໃບຫນ້າ. ຂ້າພະເຈົ້າກັ້ນໃຈຍົກກຳປັ້ນຂຶ້ນທຸບມົດຕົວນັ້ນຈົນແປ້ເປື່ອຍໄປຫມົດ. ສິ່ງນີ້ເຕືອນສະຕິໃຫ້ຂ້າພະເຈົ້າຮູ້ສຶກວ່າຕົນຍັງເປັນມະນຸດຢູ່.

ຟ້າມືດແລ້ວ. ສັດລີເລືອຊະນິດຕ່າງໆຄານສວາດໆສິດໆຢູ່ລຸ່ມຫມູ່ຕົ້ນຫນາມແລ້ງ. ເສືອດາວຮ້ອງອ້າວຂຶ້ນໃນປ່າເລິກເທິງພູ. ຂ້າພະເຈົ້າຄານໄປຍັງທິດໃດທິດຫນຶ່ງ ແລະໄດ້ພົບນ້ຳຫ້ວຍສາຍຫນຶ່ງ, ຂ້າພະເຈົ້າດື່ມໃຫ້ສົມກັບຄວາມຫິວນ້ຳ. ຕົກຕອນຄ່ຳຂ້າພະເຈົ້າຕ້ອງນອນຢູ່ເທິງກົກໄມ້ເພື່ອຫລີກຈາກໄພອັນຕະລາຍທີ່ອາດຈະເກີດຂຶ້ນໂດຍບັງເອີນ. ການນອນພັກຜ່ອນ ໄດ້ເຮັດໃຫ້ຂ້າພະເຈົ້າສົດຊື່ນຄືນມາແລະເຖິງແມ່ນວ່າ ກະເພາະອາຫານຈະເປົ່າໂກນດັ່ງກະເປົາເດີນທາງຂອງຕົນນັ້ນກໍຕາມ, ຂ້າພະເຈົ້າກໍຍັງສາມາດລວບລວມເຫື່ອແຮງທີ່ຍັງເຫລືອຢູ່ນັ້ນ ເພື່ອຍ່າງອອກສູ່ກະຫນົນຫລວງ.

ຢູ່ເທິງໂຄກກ້ວາງ, ບ່ອນເຊິ່ງຫົນທາງພາຂ້າພະເຈົ້າໄປເຖິງນັ້ນ, ມີຫມູ່ບ້ານນ້ອຍແຫ່ງຫນຶ່ງເຊິ່ງລວມມີເຮືອນຫລັງຕ່າງໆທີ່ເຮັດດ້ວຍກົກໄມ້ອໍ້. ຂ້າພະເຈົ້າກົ່ວເພງຈັງຫວະເດີນຂອງ

ນັກກິລາບານເຕະວິທະຍາໄລດີຍັງ ດັ່ງແລ້ວ ຮູ້ສຶກສວ່າງອາລົມ, ຢ່າງນ້ອຍທີ່ສຸດຂ້າພະເຈົ້າກໍຄິດວ່າຄວນເຮັດໃຫ້ເກີດຄວາມຮູ້ສຶກຈັ່ງຊັ້ນຢູ່ໃນຕົວ, ແລ້ວກ້າວເຂົ້າໄປໃນບ້ານ. ຂ້າພະເຈົ້າຍືດຄໍສ່ອງເບິ່ງເຮືອນຫລັງທຳອິດ. ຊາຍຊະລາອິນເດຍ ຜູ້ໜຶ່ງຈ່ອຍຜອມຄືໂຄງກະດູກນັ່ງຂ້າງເຕົາໄຟແລະພວມໄຂ້ສັ່ນທຶດໆຢູ່. ແຄ່ງທີ່ເປັນຕຸ່ມມະຫລູດຕູດຕິດເປິເປື້ອນ ຂອງລາວຮຽວຄືງນັ້ງຄືໄມ້ກູ່, ແພບ່ງງໜຶ່ງ, ເວົ້າໃຫ້ຖືກກ່ວານັ້ນຄືຜ້າຂາດຜືນໜຶ່ງ, ບົກຢູ່ເທິງຂາທັງສອງ.

- ສະບາຍດີທ່ານເຈົ້າຂອງບ້ານ, ຫວັງວ່າຄວາມສຸກຈະມາສູ່ຄອບຄົວຂອງທ່ານ, - ຂ້າພະເຈົ້າທັກທາຍດ້ວຍພາສາ ອູຣະດູ.

ຊາຍຊະລາຕອບພໍພຶມພຳແລ້ວໄອຕຸກໆຂຶ້ນ .

"ບາງທີຊາຍຊະລາຫນ້າສັງເວດຜູ້ນີ້ອາດເປັນພະຍາດປອດບວມ ດັ່ງນັ້ນ ຈຶ່ງບໍ່ສົນໃຈຫຍັງນຳເຮົາ", ຂ້າພະເຈົ້າຄິດຈັ່ງຊັ້ນແລ້ວກໍຫນີໄປຍັງເຮືອນຫລັງອື່ນ.

ໃນເຮືອນຫລັງທີ່ສອງ , ຂ້າພະເຈົ້າເຫັນຄົນຈຳນວນຫນຶ່ງນອນຢູ່ເທິງສາດພູກຂາດແລະໄພງກໍໄອ. ໃນເຮືອນຫລັງທີ່ສາມ ຂ້າພະເຈົ້າກໍເຫັນຫມູ່ຄົນໄອນອນເດຍລະດາດກັນຢູ່. ແມ່ຍິງຜູ້ຫນຶ່ງເອົາກ້ວຍນ້ຳໄປໃຫ້ຄົນຜູ້ຫນຶ່ງໃນຈຳນວນຄົນທີ່ນອນຢູ່ນັ້ນ ແລະປ່ອຍສຽງຄາງອອກມາດ້ວຍຄວາມສະທ້ານຢ້ານກົວເມື່ອເຫັນຂ້າພະເຈົ້າຫາກໍປ່ອນຫົວເຂົ້າໄປໃນເຮືອນ:

- ເຈົ້າຕ້ອງການຫຍັງ?

ຂ້າພະເຈົ້າກ້າວເຂົ້າໄປໃນເຮືອນແລະຖາມນາງນັ້ນ:

- ພວກລຸງຢູ່ນີ້ຈັບຫນາວຫວະ? ລະດູຫນາວຜ່ານໄປແລ້ວ, ລົມຝົນກໍບໍ່ມີແລ້ວ, ເປັນຫຍັງພວກລຸງຈຶ່ງເປັນພະຍາດປອດບວມ. ຈະຕ້ອງເຮັດເຄື່ອງນວມໃສ່.

ຢູ່ວິທະຍາໄລ ມີບາງຄັ້ງຂ້າພະເຈົ້າໄດ້ຍິນເຂົາເຈົ້າເວົ້າເຖິງວິທີປົວພະຍາດດ້ວຍເຄື່ອງນວມ. ປະຈຸບັນຂ້າພະເຈົ້າຄິດຮອດສານມະນຸດຜູ້ເຄາະຮ້າຍເຫລົ່ານີ້. ເຂົາເຈົ້າທົນໃຈທຸກຍາກທັງຊາເພາະຂີ້ກະເທີ່ແລ່ນຂຶ້ນມາຕົນຮູດ. ຖ້າມີທ່ານຫມໍ ຟລິດ ຂອງພວກຂ້າພະເຈົ້າຢູ່ນີ້ແມ່ນດີແທ້! ການທົນໃຈຝືດຕ່າງໆຂອງມວນມະນຸດ.

ແມ່ຍິງຜູ້ພວມນັ່ງຕູ່ມຫຍູ່ມຢູ່ນັ້ນງຶກຫົວ.

- ເອີ! ພວກເຮົາເບິ່ງກໍຮູ້ໂລດວ່າເຈົ້າເປັນຄົນດີ! ສ່ວນທ່ານຫມໍເກົ້ານັ້ນ ເພິ່ນເຊົາມາໂອ້

ລືມກັບພວກເຮົາແລ້ວ. ຕອນເຊົ້ານີ້ ເພິ່ນອອກຈາກປ້ອມມານີ້, ແຕ່ເມື່ອເຫັນ ຊາຄາແວດ, ຜົວຂອງຂ້ອຍ, ໄອກົ້ນໄອກອດແລ້ວ ເພິ່ນກໍອອກຈາກເຮືອນໄປ, ໂດດຂຶ້ນມ້າແລະຕີຫອບໄປເລີຍ. ສ່ວນເຈົ້າມັນຕ່າງ, ເຈົ້າໃຈດີຫລາຍ. ໄຫວ້ວອນໃຫ້ເຈົ້າອາຍຸຫມັ້ນຂວັນຍືນຊົ່ວກາລະນານເກີດ.

ຊາຄາແວດ, ຜົວຂອງນາງນັ້ນ, ນອນຫັນໃຈຢ່າງລຳຄານຢູ່ເທິງສາດພູກ, ລາວພະຍາຍາມງວາກມາຫາຂ້າພະເຈົ້າແລະເວົ້າເປັນສຽງຜ່າວໆ.

- ພາວະນາໃຫ້ເຈົ້າມີເງິນຫລາຍອັດຢູ່ໃນກົງຍັງດີກວ່າ. ໄປເທາະບ່າວເອີຍ! ຢ່າໄດ້ມາຢືນເບິ່ງພວກເຮົາຕາຍຢູ່ຫນີ້ເທາະ.

ຂ້າພະເຈົ້າບໍ່ສາມາດຈະຄຶດເຖິງເລື່ອງກິນເລື່ອງນອນຢູ່ໃນເຮືອນຫລັງນັ້ນໄດ້ອີກແລ້ວ, ພໍກ້າວເຂົ້າສູ່ເຮືອນຫລັງທີສີ່, ຂ້າພະເຈົ້າກໍປະເຊີນກັບຮູບພາບຢ່າງນັ້ນເຊັ່ນກັນ : ຄົນທັງຫມົດຢູ່ໃນເຮືອນບໍ່ວ່າຜູ້ຊາຍ, ຜູ້ຍິງ ແລະເດັກນ້ອຍ - ລ້ວນແຕ່ນອນຊາບລາບແລະໄອກົ້ນໄອກອດຢູ່. ຂ້າພະເຈົ້າຖືວ່າຢູ່ແຫ່ງນີ້ຄືຫມູ່ບ້ານຂອງຄົນເປັນວັນນະໂລກ, ຈະຢູ່ຕໍ່ໄປເຮັດຫຍັງ, ດີທີ່ສຸດແມ່ນຮີບໄປຕໍ່, ຊອກຫາປ້ອມປືນບ່ອນໃດບ່ອນຫນຶ່ງແລ້ວຂໍພັກເຊົາ. ການເຕື່ອນທັບທາງໄກເຮັດໃຫ້ຂ້າພະເຈົ້າເມື່ອຍເພຍໄປຫມົດ, ແລະຂ້າພະເຈົ້າກໍຄາດວ່າຈະກັບສູ່ຝັ່ງທະເລແລ້ວຊອກຫາເຮັດວຽກຢູ່ບ່ອນໃດບ່ອນຫນຶ່ງໃນນິຄົມຕ່າງໆ. ເຖິງຈັ່ງໃດ, ການະຂອງພະນັກງານຫ້ອງການຜູ້ຫນຶ່ງກໍຄົງຄ້ຳປະກັນກ້ອນເຂົ້າຈີ່ແລະບ່ອນຊຸກຫົວນອນ ໃຫ້ແກ່ຂ້າພະເຈົ້າ.

ເປັນອັນວ່າ ຂ້າພະເຈົ້າ, ຄົນຜູ້ຊັດເຊພະເນຈອນຢ່າງອັບໂຊກ, ກໍໄດ້ອອກຈາກຫມູ່ບ້ານໄປ. ຂະນະນັ້ນດວງຕາເວັນຂຶ້ນສູງແລ້ວ, ແລະຂ້າພະເຈົ້າຄົງສາມາດໄປເຖິງປ້ອມປືນກ່ອນຕອນຫົວຄ່ຳດັ່ງທີ່ເຂົາເຈົ້າເວົ້າກັບຂ້າພະເຈົ້ານັ້ນ. ແຕ່ຂ້າພະເຈົ້າອອກຈາກບ້ານມາບໍ່ພໍຫລັກ, ຢູ່ເບື້ອງຫນ້າຂອງຂ້າພະເຈົ້າ, ກໍມີທະຫານສອງຄົນຈັບອາວຸດ, ນຸ່ງຖືແບບທະຫານຫົວເມືອງຂຶ້ນຂອງພວກເຮົາປະກົດຕົວຂຶ້ນຢູ່ພາກພຸ່ມໄມ້, ເຂົາມຸ່ງຫນ້າມາຫາຂ້າພະເຈົ້າ. ແລະແນປືນໃສ່ :

- ກັບຄືນໄປ!

- ມີເລື່ອງຫຍັງຫວະ? - ຂ້າພະເຈົ້າຍົກມືຂຶ້ນສອງເບື້ອງ. - ຂ້າພະເຈົ້າ ປະຕິບັດຕາມຄຳສັ່ງ...

- ກັບຄືນໄປ! ບໍ່ຊັ້ນພວກກູຍິງ. - ມີຄຳຕອບອັນແຂງກະດ້າງດັງອອກມາ.

ສຽງກະສຸນນັດໜຶ່ງດັງປັງຂຶ້ນ, ບິນຊວິດຂ້າມຫົວ, ພາໃຫ້ຂ້າພະເຈົ້າຄຶດຫຍັງບໍ່ທັນແລ້ວ. ຂ້າພະເຈົ້າຕັດຕີນຫມາ ບິບໄປຢ່າງບໍ່ທັນຈຳແນກແລວປ່ອງຊ່ອງທາງເລີຍ. ລູກທະນູຕິດເຈ້ຍລູກໜຶ່ງບິນສືວໄປເບື້ອງໜ້າຂອງຂ້າພະເຈົ້າ. ມັນຄ່ອຍໆສງບຈຶກລົງໃສ່ເດີ່ນຫຍ້າທີ່ຫມາດໄປຍ້ອນດວງອາທິດຈີ່ເຜົາ. ຂ້າພະເຈົ້າແກະເອົາເຈ້ຍແຜ່ນນັ້ນອອກມາ ແລ້ວອ່ານໜັງສືແກວຕ່າງໆທີ່ຂຽນດ້ວຍສໍດຳ, ຕົວໜັງສືເຫລົ່ານັ້ນເຮັດໃຫ້ເລືອດຢູ່ໃນຮ່າງກາຍຂອງຂ້າພະເຈົ້າ ເກືອບກ້າມໄປ: "ຢູ່ທີ່ ນາບູຄາດ ພວມເກີດພະຍາດກາລະໂລກ ໃພກາຍເຂດປັກທຸງເຫລືອງໄປຈະຖືກຍິງຕາຍ. ໂບໂຣ, ຜູ້ບັນຊາການໜ່ວຍຮັກສາການ".

ພວກທະຫານສາລະເວ ຍືນຢູ່ຕີນປ່າຫ່າງຈາກຂ້າພະເຈົ້າສອງສາມຮ້ອຍແມດ. ບໍ່ຈັກວ່າເຂົາທັງຮ້ອງແຜດທັງໂບກມືໃນເລື່ອງໃດ, ຂ້າພະເຈົ້າກ້າວໄປອີກກ້າວໜຶ່ງ ທະຫານສອງຄົນນັ້ນ ກໍຍິງມາໃສ່ໂລດ. ດ້ວຍສະພາບຈິດທີ່ສິ້ນຫວັງທຸກຢ່າງ ແລະເບື່ອໜ່າຍເພາະເລື່ອງທີ່ເກີດຂຶ້ນມາຢ່າງບັງເອີນນັ້ນ, ຂ້າພະເຈົ້າຍ່າງກັບຄືນໄປຍັງ ນາບູຄາດ ຢ່າງອິລິກຊິກໂຊນ. ລູກປືນຫລືໂລກລະບາດກໍເຊັ່ນກັນນັ້ນແລ້ວ, ອັນໃດກໍຫມາຍເຖິງຊີວິດເຫມືອນກັນ. ແຕ່ຢູ່ຜູ້ດຽວກໍເປັນໜ້າສະທ້ານຍ້ານກົວທີ່ສຸດ. ຂ້າພະເຈົ້າບໍ່ກ້າສ່ຽງຊີວິດຍ່າງເຂົ້າໄປຍັງເຮືອນຫລັງຕ່າງໆເຊິ່ງຍາມໃດ ກໍມີສຽງໄອ ອຸ! ອຸ! ອອກມາ, ຂ້າພະເຈົ້າຍ່າງເບັດໜ້າໄປໃສ່ເສັ້ນທາງທີ່ເຕັມແຕ່ຂີ້ຝຸ່ນແລ້ວນັ່ງຫລັບຕາຢູ່ຫັ້ນດົ້ງເປັນຊົ່ວໂມງ, ຂ້າພະເຈົ້າສງວສະຫຍອງ, ບໍ່ຢາກແນມເບິ່ງໂລກທີ່ໜ້າຫວາດກົວນີ້ອີກ. ໄດ້ຍິນສຽງປືນດັງສອງສາມນັດຢູ່ໄກໆ, ແຕ່ຂ້າພະເຈົ້າບໍ່ຢາກຈະຕຶງຄຶງເລີຍ. ປະໃຫ້ລູກປືນນັດໃດນັດໜຶ່ງເຈາະຮ່າງກາຍຂອງຂ້າພະເຈົ້າຍັງດີກ່ວາ...

ຫລັງຈາກນັ້ນ ຂ້າພະເຈົ້າກໍປະກົດໄດ້ຍິນສຽງບາດຕີນຄົນ.

- ນັ່ງຕັນທາງແບບນີ້ ຈັ່ງແມ່ນບໍ່ເຂົ້າທ່າຈັກດີເລີຍ. - ສຽງເວົ້າອັນນຸ່ມນວນ ດັງຂຶ້ນຢູ່ຂ້າງຫູຂ້າພະເຈົ້າ ແລ້ວຂ້າພະເຈົ້າກໍມືນຕາຂຶ້ນ.

ຄົນຜູ້ຫນຶ່ງສຸບຫມວກ ກີໂບສີຂາວ, ໃສ່ແວ່ນຕາດຳ, ນຸ່ງເສື້ອຄຸມພື້ນຫລົມໆ, ພາຍກົງ ບ່ອງບ່າສອງຫນ່ວຍ, ພວມຍືນແນມເບິ່ງຂ້າພະເຈົ້າຢູ່.

- ຫລືວ່າຂ້ອຍກໍ່ຄວາມລຳຄານໃຫ້ເຈົ້າຊັ້ນຫວະ? - ຂ້າພະເຈົ້າຖາມທັງພະຍາຍາມເວົ້າແບບທ້າທາຍ.

- ໃນບ້ານເກີດພະຍາດກາລະໂລກ. ຂ້ອຍຂໍນຳເຈົ້າຢ່ານັ່ງສືບເອົາຂີ້ຝຸ່ນຢູ່ນີ້, - ລາວຕອບໂດຍບໍ່ສົນໃຈກັບຄຳຖາມຂອງຂ້າພະເຈົ້າເລີຍ. - ລຸກຂຶ້ນດີ, ພວກເຮົາພ້ອມກັນໄປນັ່ງຢູ່ຮົ່ມພຸ່ມ. - ລາວຍິ້ມນ້ອຍຫນຶ່ງ. - ຢ່າດີ້ດຶງເລີຍ, ເຈົ້າຈົ່ງຟັງຄວາມຜູ້ອາວຸໂສກ່ວາ...

ຄວາມເວົ້າທີ່ບົ່ງບອກເຖິງຄວາມໂອບເອື້ອອາລີນີ້ ຊວນໃຫ້ຂ້າພະເຈົ້າກະທຳຕາມຢ່າງບອກນອນສອນງ່າຍ.

ເມື່ອພວກຂ້າພະເຈົ້າໄປນັ່ງຢູ່ກ້ອງເງົາກຳແພງຫີນເປັນທີ່ຮຽບຮ້ອຍແລ້ວ, ຄົນແປກຫນ້າຜູ້ນັ້ນ ກໍຈົກເອົາແພມົນມາເຊັດຫນ້າແລ້ວເວົ້າວ່າ:

- ຈັ່ງແມ່ນຊວຍ, ຄືຊິແມ່ນເຈົ້າໄປທິດ ແກັນເດີ ແລ້ວຫລົງທາງ ຈຶ່ງຖືກພວກທະຫານສາລະເວຊູ່ແມ່ນບໍ່, ເອົາລະ, ຈົ່ງຕັ້ງສະຕິຄືນໃຫມ່ ແລ້ວຕອບມາເບິ່ງດູ, ພວກຂີ້ໂງ່ນັ້ນຂູ່ຊິຍິງເຈົ້າແມ່ນບໍ່?

- ຈ້າວ.

- ຄັນຊັ້ນ, ຊິເຮັດຫຍັງໄດ້. ຕ້ອງລໍຖ້າສິ່ງທີ່ບໍ່ອາດຈະຫລີກລ້ຽງໄດ້ເທົ່ານັ້ນແລ້ວ. ເວລາໃດຄົນທີ່ຢູ່ໃນເຂດປັກຫຼຸງເຫລືອງນັ້ນຕາຍຫມົດແລ້ວ, ພວກທະຫານຈະເອົານ້ຳມັນທີດບ້ານນາບູຄາດແລ້ວເຜົາໃຫ້ໄຫມ້ຫມົດ.

ສຽງປືນດັງກ້ອງມາແຕ່ໄກໆ. ບາດຫນຶ່ງ.

- ພວກທະຫານຍິງຫມາທີ່ແລ່ນມາແຕ່ເຂດເກີດພະຍາດກາລະໂລກໃດຫັ້ນ.

- ຄັນຊັ້ນຄົນເດລະ?

- ພວກຄົນໄຂ້ພວມນອນລຽນກັນຢູ່; ມີຫລາຍຄົນກໍຕາຍໄປແລ້ວ.

- ຕໍ່ໄປຈະເປັນແນວໃດລະ? - ຂ້າພະເຈົ້າຖາມ.

- ຫລັງຈາກນັ້ນ ເຂົາເຈົ້າ ຈະໄຖດິນພື້ນຂຶ້ນ, ວາງສານຫມູໃສ່ໃນກ້ຳຂອງມັນແລະຫວ່ານການຊຶກລໍຣິວໄປທົ່ວພື້ນທີ່ແຫ່ງນີ້. ປີຫນຶ່ງຕໍ່ມາ ຄົນອາດຈະສາມາດມາຢູ່ພ້ອມດ້ວຍ...

ຄວາມສິ້ນຫວັງກຸ້ມກ້ອມຈິດໃຈຂອງຂ້າພະເຈົ້າ. ເສັດແລ້ວບາດນີ້, ພວກຂ້າພະເຈົ້າຖືກປິດລ້ອມໄວ້ຢ່າງແຫນັ້ນຫນາ. ຢູ່ແຫ່ງນີ້ ພວກຂ້າພະເຈົ້າພວມຖືກພິຍັກພິໄຂແຫ່ງພະຍາດກາລະໂລກຄືພວກແມ່ພະຍາດບີ້ກັດຫຍຳ້. ພວກມັນໂຫດຮ້າຍກ່ວາເສືອສາງຊ້າງເກື່ອນຕັ້ງຫລາຍເທົ່າ. ຢູ່ເບື້ອງຫລັງຂອງທຸງສີເຫລືອງເຫລົ່ານັ້ນແມ່ນລູກກະສຸນປືນທີ່ພວມລໍຖ້າຢູ່. ເຂົາເຈົ້າບໍ່ໃຫ້ໃຜແລ່ນຫວິດອອກຈາກເຂດນີ້ໄປ, ແລ້ວພະຍາດກາລະໂລກນັ້ນຊ້ຳບໍ່ສາມາດປົວໄດ້ເລີຍ.

ຂ້າພະເຈົ້າເສືອກຕາເບິ່ງຜູ້ທີ່ພວມໂອ້ລົມກັບຄົນ, ໃບຫນ້າທີ່ແຫ້ງຫມອດແຫ້ງເຄົາກັງເກົາແລະມີຮອຍຫຼ່ນ້ອຍໆຂອງລາວນັ້ນ ເບິ່ງແລ້ວຈັ່ງແມ່ນສຸຂຸມທີ່ສຸດ, ດວງຕາສີຂີ້ເຖົ່າອັນວ່ອງໄວໃສແຈວນັ້ນ, ຈ້ອງມອງມາເບິ່ງຍັງຂ້າພະເຈົ້າ.

- ເບິ່ງຄືວ່າພວມສັງເກດເບິ່ງໃບຫນ້າຂອງຂ້ອຍແມ່ນບໍ່? - ຂ້າພະເຈົ້າຝືນຍິ້ມເພື່ອບໍ່ໃຫ້ຄົນທີ່ໃກ້ຈະຕາຍຜູ້ນີ້ເຫັນວ່າຂ້າພະເຈົ້າຢ້ານພະຍາດກາລະໂລກ.

- ແມ່ນແລ້ວ, - ລາວຕອບ. - ຖ້າຂ້ອຍບໍ່ຫລົງແລ້ວ, ເຈົ້າເຄີຍໄປທີ່ ແບັນຣັກບໍ.

- ຂ້ອຍເຄີຍໄປຫັ້ນເທື່ອຫນຶ່ງ - ຂ້າພະເຈົ້າຕອບຢ່າງພຶມພຳ.

- ຈົ່ງອະໄພໃຫ້ຂ້ອຍແດ່ເດີ, ເພາະຂ້ອຍມີແຕ່ການໂລເລ, - ລາວເວົ້າຕໍ່. - ມີເທື່ອຫນຶ່ງເຈົ້າໂດດລົງມາແຕ່ຮ້ານໂດດ ເພື່ອກູ້ເອົາຄົນຕາຍດິກນ້ຳແມ່ນບໍ່?

ເລື່ອງພະຈົນໄພຢູ່ ແບັນຣັກບໍ ກັບມາມີຊີວິດຊີວາຂຶ້ນໃນຄວາມຊົງຈຳຂອງຂ້າພະເຈົ້າອີກ, ຂ້າພະເຈົ້າເວົ້າ:

- ຢູ່ໃນການະຂອງຂ້ອຍແລ້ວ, ໃຜໆກໍຈະເຮັດແນວນັ້ນເຊັ່ນກັນ. ຂ້ອຍໂດດລົງທະເລເມື່ອເຫັນຄົນຜູ້ຫນຶ່ງພວມຈະຈົມນ້ຳຕາຍ. ແຕ່ແລ້ວ ຂ້ອຍກໍບໍ່ຮູ້ວ່າຜູ້ທີ່ຂ້ອຍຊ່ວຍຊີວິດໄວ້ນັ້ນແມ່ນໃຜ.

ລາວລຸກຂຶ້ນ ແລະ ຈັບມືຂ້າພະເຈົ້າ.

- ໃຫ້ຂ້ອຍຂໍສະແດງຄວາມຂອບໃຈນຳເຈົ້າແດ່ເທາະ ຫມາຍຄວາມວ່າ ຜູ້ຊ່ວຍຊີວິດຂ້ອຍ

ນັ້ນ ແມ່ນເຈົ້ານີ້ເອງ. ເຮືອກູ້ກະທັນຫັນໄດ້ຮັບເອົາຂ້ອຍຈາກມືຂອງເຈົ້າຂຶ້ນມາ ແລ້ວນຳເອົາຂ້ອຍໄປໃນຕົວເມືອງທັນທີ.

- ຂ້ອຍດີໃຈທີ່ສຸດທີ່ເຫັນເຈົ້າເຂັ້ມແຂງແຮງດີ, - ຂ້າພະເຈົ້າເວົ້າຕອບທັງຈັບມືລາວແໜ້ນ, - ເສຍດາຍແຕ່ວ່າພວກເຮົາມາພົບກັນເທື່ອໃໝ່ໃນສະພາບເຊັ່ນນີ້...

- ພວກເຮົາບໍ່ຄວນປ່ອຍໃຫ້ຄວາມຄິດອັນມືດມົນມາຫລອກຫລອນຕໍ່ໄປອີກ. ຂ້ອຍເປັນນັກຊີວະວິທະຍາ, ສຳລັບຂ້ອຍແລ້ວ, ທຳມະຊາດບໍ່ເຄີຍຂຶ້ນວ່າຈະເປັນເລື່ອງທີ່ໜ້າຫວາດກົວ ແລະເລິກລັບເກີນຂອບເຂດຄືຜູ້ອື່ນໆດອກ. ນາມສະກຸນຂອງຂ້ອຍແມ່ນ ມິນໂຮຍເຊີ, ຂ້ອຍການພ້ອມຊິດຊ່ວຍເຈົ້າ.

- ຂ້ອຍແມ່ນ ເຊບຸຍແອນ ປິນ, - ຂ້າພະເຈົ້າອ່ງງດົວຢ່າງສຸພາບ ດັ່ງນັກຮຽນດີຢ້ງ ຜູ້ມີຄວາມສຸພາບຮຽບຮ້ອຍ.

- ປິນ, ດີຫລາຍ, - ທ່ານ ມິນໂຮຍເຊີ ເວົ້າດ້ວຍວາດຄົ້ນຄິດ, ຫລັງຈາກນັ້ນ ລາວກໍພ້າວເວົ້າເສີມຂຶ້ນອີກ: - ເອົາ, ກ່ອນອື່ນໝົດຕ້ອງກິນກ່ອນຈັກນ້ອຍ, ແລ້ວຈຶ່ງຄິດຫາຊ່ອງທາງ.

ທ່ານ ມິນໂຮຍເຊີ ເອົາເຂົ້າຈີ່ແຫ້ງແລະເຄື່ອງກະປອງອອກມາຈາກກົງ.

- ກ້າກອກເຫລົ້າໂຮມຈັກສອງສາມຢົດປົນກັບນ້ຳກິນແທ້ດີທີ່ສຸດ. - ລາວເວົ້າແລ້ວລິນເຫລົ້າໂຮມທີ່ບັນຈຸຢູ່ໃນແກ້ວນັ້ນລົງໃສ່ຈອກນ້ອຍ. - ປິນ, ດື່ມອັນນີ້ໝົດແລ້ວຈຶ່ງເລີ່ມກິນອາຫານ.

ລາວຫງ່ງງຫູຟັງສຽງໄອທີ່ດັງກ້ອງອອກມາຈາກເຮືອນຂອງຊາວນາ.

ພະຍາດກາລະໂລກທຳລາຍປອດ... ໂດຍແມ່ນແມ່ພະຍາດພິເສດຊະນິດໜຶ່ງເປັນຕົ້ນເຫດ. ປະເພດໂຕໝັດທີ່ຢູ່ໃນຮ່າງກາຍຂອງສັດຈຳພວກມັກແທ້ນເຊັ່ນໜູຊີງ, ໜູແຜງໜູນາ ແມ່ນຜູ້ນຳເອົາແມ່ພະຍາດມາແຜ່ພາຍຢູ່ບໍລິເວນນີ້, ເຂົາເຈົ້າໃສ່ແຮ້ວເອົາມັນ. ອາດມີນາຍພານຜູ້ໃດຜູ້ໜຶ່ງໄປລ່າເນື້ອຢູ່ໃນເຂດໃດເຂດໜຶ່ງຫລັກຂັບຫລືລອກໜັງສັດ ທີ່ຖືກແຮ້ວນັ້ນ, ພວກມັນຕິດເຊື້ອໂລກແລ້ວໝາກພົນຂອງມັນກໍເປັນດັ່ງນີ້ແລ້ວ.

ເຫລົ້າໂຮມຂອງທ່ານ ມິນໂຮຍເຊີ, ເວົ້າແທ້ມັນແມ່ນເຫລົ້າປຸກປະເພດໜຶ່ງ. ດື່ມເຂົ້າ

ໄປແລ້ວ, ຂ້າພະເຈົ້າຮູ້ສຶກເບົາເນື້ອເບົາກາຍຂຶ້ນມາຫນ້ອຍຫນຶ່ງ, ແລ້ວຂ້າພະເຈົ້າກໍເວົ້າເປັນເຊີງຍອກລາວວ່າ:

- ມິນໂຮຍເຊີ, ປະກົດວ່າທ່ານເປັນມິດທີ່ດີກັບພະຍາດກາລະໂລກແມ່ນບໍ່?

ນັກຊີວະວິທະຍາແນມເບິ່ງປາຍນິ້ວມືຕ່າງໆຂອງຕົນຢູ່ດ້ວຍອາດຄົ້ນຄິດ.

- ຢູ່ບໍລິເວນນີ້ເຫັນວ່າມີພະຍຸກາລະໂລກສອງຊະນິດ. ຊະນິດຫນຶ່ງເອີ້ນວ່າ "ວາບາ", ຊະນິດນີ້ຂ້າໄປຫມົດທຸກຄົນຢ່າງບໍ່ໄວ້ຫນ້າໃຜທັງຫມົດ: ຜູ້ຕິດພະຍາດຊະນິດນີ້ຕາຍໄວທີ່ສຸດ. ຊະນິດທີ່ສອງແມ່ນ "ມາຣີ". ຊະນິດນີ້ກໍຂ້າຄົນໄດ້, ແຕ່ຊັກຊ້າກວ່າ... ເປັນຫຍັງເຈົ້າບໍ່ກິນ , ປິນ?

ຂ້າພະເຈົ້າບໍ່ສາມາດຈະກືນເຂົ້າຈີ່ລົງໄດ້, ຄຳເວົ້າຕ່າງໆຂອງທ່ານ ມິນໂຮຍເຊີ ເຮັດໃຫ້ຮ່າງກາຍຂອງຂ້າພະເຈົ້າເກີດຮູດຮ້ອນຮູດຫນາວຂຶ້ນມາ. ຕ້ອງໄດ້ພະຍາຍາມຈົນເກືອບສຸດວິໄສ, ຂ້າພະເຈົ້າຈຶ່ງທຸບທ່າງຄືນມາໄດ້. ປານນັ້ນ, ຄົນຜູ້ເຊິ່ງນັ່ງຢູ່ຕໍ່ຫນ້າຂ້າພະເຈົ້ານີ້ຍັງເວົ້າເຖິງພະຍາດກາລະໂລກ ດ້ວຍທ່າທີປົກກະຕິ.

- ນີປິນ, ບາດນີ້ເຈົ້າເອົາໃຈໃສ່ຟັງເດີ. ຂ້ອຍຄົ້ນຄວ້າພະຍາດກາລະໂລກມາໄດ້ຫລາຍປີແລ້ວ ແລະກໍໄດ້ສັກຢາຕ້ານທານເຊື້ອຊະນິດຫນຶ່ງໃສ່ຕົນເອງແລ້ວ, ຢາຊະນິດນີ້ເຮັດໃຫ້ຮ່າງກາຍຂອງຂ້ອຍລອດພົ້ນຈາກພະຍາດໄດ້ທັງສອງຊະນິດຄື ວາບາແລະ ມາຣີ. ເປັນຫນີ້ບຸນຄຸນກໍຕ້ອງຕອບບຸນແທນຄຸນ. ຂ້ອຍຢາກຈະຊ່ວຍເຈົ້າ. ແຕ່ປະຈຸບັນນີ້ ຂ້ອຍກໍມີແຕ່ພິດຕ້ານເຊື້ອວາບາພຽງຢ່າງດຽວ, ຖ້າເຈົ້າຍັງບໍ່ທັນຕິດເຊື້ອໂລກນີ້ເທື່ອແລ້ວກໍພໍມີຫວັງຢູ່ວ່າ ຫລັງຈາກສີດເຊື້ອນີ້ເຂົ້າໄປແລ້ວ, ວາບາຈະບໍ່ກ້າແຕະຕ້ອງເຖິງຄີງຂອງເຈົ້າອີກ. ແຕ່ຖ້າຢູ່ອ້ອມຂ້າງຂອງພວກເຮົາໃນຂະນະນີ້ຫາກແມ່ນມາຣີແລ້ວ... - ທ່ານ ມິນໂຮຍເຊີ ແນມເບິ່ງຂ້າພະເຈົ້າດ້ວຍຄວາມວິຕົກ, - ວິທະຍາສາດກໍຈຳຕ້ອງກອດຫົວເຂົ່າເບິ່ງເລັບມືເບິ່ງຢູ່ລ້າໆ, ຊ່ວຍຫຍັງເຈົ້າບໍ່ໄດ້.

- ຫມາຍຄວາມວ່າ ວາບາ ກໍບໍ່ແນ່ໃຈວ່າຈະຫວິດ? - ຂ້າພະເຈົ້າພຶມພຳ. - ແຕ່, ທ່ານ ມິນໂຮຍເຊີ, ຂ້ອຍຍັງຢາກມີຊີວິດຢູ່...

- ເຈົ້າເດ່ມືມາ, ແລະອ່ວາຍຫນ້າຫນີ, ຂ້ອຍເຮັດຫຍັງກໍບໍ່ຕ້ອງເບິ່ງ, - ທ່ານ ມິນໂຮຍເຊີເວົ້າ.

ຫນຶ່ງນາທີຕໍ່ມາ, ຂ້າພະເຈົ້າກໍຮູ້ສຶກວ່າມີເຂັມດວງຫນຶ່ງສຽບເຂົ້າແຂນເບື້ອງຊ້າຍ, ແລະໄດ້ຍິນສຽງນັກຊີວະວິທະຍາສາດງາມວ່າ:

- ຈັ່ງໃດລະ, ບີນ.

- ດັກຫລາຍ, - ຂ້າພະເຈົ້າເວົ້າກະດຸກກະດັກອອກມາ. ໃນໃຈຄຶດໂມໂຫຂຶ້ນມາຢ່າງຜິດປົກກະຕິ.

- ບໍ່ໄຂ້ຕິ?

- ບໍ່, ບໍ່, - ຂ້າພະເຈົ້າເວົ້າຄ່ອຍໆ. ໂຄງແຂ້ວທັງສອງເບື້ອງສັ່ນກັບໆ, ສ່ວນຄາງກະໄຕນັ້ນຊໍ້າຄ້າຍກັບວ່າຍຶດຫົດໄດ້ ພໍປານເຫລັກລໍຊໍອັນໄດ້ເຮັດໃຫ້ຂ້າພະເຈົ້າລໍາຄານທີ່ສຸດ.

ທ່ານ ມິນໂຮຍເຊີ ກໍາມືຂອງຂ້າພະເຈົ້າມາຈັບເບິ່ງກໍາມະຈອນ.

- ບີນ ຕັ້ງສະຕິດີໆ. ເສັ້ນປະສາດຖືກກະຕຸ້ນຫນ້ອຍຫນຶ່ງ, ແລ້ວຈະເຊົາໄປເອງດອກ. ເບິ່ງ, ໃຫ້ຂ້ອຍຊ່ວຍຍ້າຍບ່ອນນັ່ງໃຫ້ເຈົ້າພໍໃຫ້ສະດວກກວ່ານີ້...

ພວກຂ້າພະເຈົ້ານັ່ງຢູ່ເທິງໂງ່ນຫີນກ້ອງຮົ່ມໄມ້.

ທ່ານ ມິນໂຮຍເຊີເວົ້າ:

- ຂ້ອຍຊິໄປຈອບເບິ່ງກ່ອນ, ເຈົ້ານັ່ງຢູ່ນີ້ໃຫ້ສະບາຍໃຈກ່ອນເດີ.

ຂ້າພະເຈົ້າຮູ້ສຶກຫວາງໃຈເມື່ອລາວຈາກໄປ. ຄົນຂີ້ໄບ່ຜູ້ນີ້ເຮັດໃຫ້ຂ້າພະເຈົ້າໃຈຮ້າຍ.

ດວງເດືອນສີແດງຊໍ້າພົ້ນພຸ່ງຂຶ້ນມາ ແລ້ວຢູ່ທາງພຸ່ມໄມ້ໄກໆພຸ້ນມີສຽງຫມາປ່າຫອນຂຶ້ນມາ. ແຄມປ່າເບື້ອງນັ້ນມີສຽງກິວແລະສຽງຮ້ອງຫາກັນຂອງພວກທະຫານສາລະເວດັງກ້ອງຂຶ້ນ. ມີສຽງປືນດັງຂຶ້ນສອງສາມນັດ. ແມ່ນບໍ່ວ່າເຂົາເຈົ້າຍິງທ່ານ ມິນໂຮຍເຊີ ຕາຍຢູ່ບໍລິເວນໃກ້ໆຫຸງເຫລືອງນັ້ນແລ້ວ? ຍ້ອນລາວອາດຈະຄິດຫລົບຫນີໄປຈາກເຂດຫມໍ້ນະຮົກເມືອງຄົນນີ້.

ຫລັງຈາກນັ້ນ, ພາຍໃຕ້ເງົາຂອງທ້ອງຟ້າສີຄາມຈາງໆໃນຍາມຮຸ່ງອາລຸນນັ້ນ, ຂ້າພະເຈົ້າກໍແນມເຫັນຄົນຈີນຜູ້ຫນຶ່ງປະກົດເປັນເງົາຂຶ້ນມາ ແລະພວມກົ້ມແນມລົງເບິ່ງຂ້າພະເຈົ້າ. ເງົາ

ຂອງຄົນຈີນຜູ້ນັ້ນຫາຍໄປ, ແລ້ວຕໍ່ມາກໍແມ່ນທ່ານ ເວີນເຊີນ ທີ່ພວມຫົວໃສ່ຂ້າພະເຈົ້າຢ່າງຍິ້ມແຍ້ມແຈ່ມໃສ.

ພໍຂ້າພະເຈົ້າມືນຕາຂຶ້ນ ກໍເຫັນທ່ານ ມິນໂຮຍເຊີ ຢືນຢູ່ຕໍ່ຫນ້າຂອງຂ້າພະເຈົ້າແລະເວົ້າວ່າ:

- ປີນ, ເຈົ້າບໍ່ໄອຕີ? ດີຫລາຍ. ກ້າຈະໄອໃຫ້ນອນຂວ້ຳຫນ້າລົງເດີ. ແບບນັ້ນໄຄແດ່.

ດວງຈັນແດງເຂັ້ມແຂວນໂຕ່ນເຕັ່ນຢູ່ເທິງທິວທັດແຫ່ງປ່າດົງວົງກົດນັ້ນ. ສຽງໄອຂອງຄົນໄຂ້ແລະສຽງປືນດັງກະຈັດກະຈາຍຢູ່ນັ້ນ ໄດ້ຂັບໄລ່ຄວາມງຽບສະຫງັດເຍັນຍ້າງຂອງລາຕີການແຫ່ງເຂດອາກາດຮ້ອນຈັດນັ້ນໄປ.

ທ່ານ ມິນໂຮຍເຊີ ງຽງຫູຟັງ.

- ເຂົາເຈົ້າຂ້າຫມູ່ຫມາຕາຍໄປຫມົດແລ້ວ ແລະຂ້າແມ່ຍິງຜູ້ຫນຶ່ງ. ຂະນະນີ້ບໍ່ວ່າແຕ່ຈະເປັນກໍລະນີໃດໆ ເຂົາກໍຍິງທັງນັ້ນ. ເຂົາຮູ້ຈັກຂ້ອຍດີ ແຕ່ເຖິງຢ່າງນັ້ນກໍຕາມ, ບາງທີເຂົາເຈົ້າກໍຄົງຄຶດວ່າພວກເຮົາພວມຈະໄຊ້ອຸບາຍຫລົບຫນີອອກຈາກແຫ່ງນີ້ໄປ. ແນ່ນອນ, ສຳລັບພວກເຮົາແລ້ວ, ກ້າປົບຫນີໄປຈາກນີ້ມັນເປັນເລື່ອງບໍ່ດີເລີຍ. ເປັນຫຍັງພວກເຮົາຈຶ່ງແບ່ງປັນການຄຶກລົງໂທດເຊິ່ງພວກເຮົາຄວນຈະຮັບເອົາຜູ້ດຽວນັ້ນໄປໃຫ້ຜູ້ອື່ນໆ.

ຄວາມເວົ້າຕ່າງໆເຫລົ່ານີ້ເຮັດໃຫ້ຂ້າພະເຈົ້າໂມໂຫຂຶ້ນ.

- ຂ້າພະເຈົ້າບໍ່ມີຫຍັງພໍທີ່ຈະຖືກລົງໂທດ. ທ່ານຄວນເວົ້າສິ່ງນັ້ນກັບຕົວຂອງທ່ານເອງເທົ່ານັ້ນ. ທ່ານ ມິນໂຮຍເຊີ, ກ້າທ່ານຢາກຮູ້, ຂ້າພະເຈົ້າກໍຈະເວົ້າໃຫ້ທ່ານຮູ້ເອົາໄວ້ວ່າ, ຂ້າພະເຈົ້າຊິປະຢ້າວວາງເຮືອນມາເຮັດຫຍັງ, ກ້າບໍ່ຕ້ອງການສ້າງການະຂອງຕົນເອງ...

ຕາເວັນຂຶ້ນສູງແລ້ວ. ຄວາມຫິວໂຫຍຫອດແຫ້ງ ທາລຸນ ຂ້າພະເຈົ້າຢ່າງຮຸນແຮງ. ນ້ຳຢູ່ໃນກະຕຸກຕ່າງໆກໍດື່ມໄປຫມົດແລ້ວ. ນ້ຳຢູ່ໃນເຮືອນຂອງປະຊາຊົນກໍມີເຊື້ອໂລກ. ສ່ວນສ້າງທີ່ມີນ້ຳສະອາດນັ້ນຊ້ຳຢູ່ນອກເຂດປັກຫຼຸງເຫລືອງພຸ້ນ. ທ່ານ ມິນໂຮຍເຊີ ເວົ້າ:

- ກ້າເຈົ້າຊິສູບເອົາແຕ່ຂີ້ຝຸ່ນຢູ່ແບບນີ້ ແມ່ນອັນຕະລາຍທີ່ສຸດ. ຈະຕ້ອງຫັນໃຈຊ້າໆແລະຫັນໃຈທາງດັງເທົ່ານັ້ນ. ແບບນັ້ນຈຶ່ງຈະກັນໄດ້...

ເພິ່ນເອົາແພອັດປາກທີ່ເຮັດດ້ວຍຜ້າບາງນັ້ນມາປົກປາກແລະດັງໃຫ້ຂ້າພະເຈົ້າ. ຂ້າພະເຈົ້າບໍ່ຂັດຂືນ ແລ້ວເພິ່ນກໍຜູກສົ້ນເຊືອກຂອງແພນັ້ນຢູ່ທາງງ່ອນດົ້ນຂອງຂ້າພະເຈົ້າ.

ດິນແລະຫີນກ້ອນແຜດເຜົາຈົນຮ້ອນຢູ່ພາຍໃຕ້ແສງແດດ. ພວກຂ້າພະເຈົ້ານັ່ງງຽບຢູ່ຂ້າງຮົ້ວເນັ້ງໆແລະສູບເອົາອາກາດທີ່ອຶດອັດນັ້ນຜ່ານຮູດັງເຂົ້າໄປ. ນັບວ່າເປັນໂຊກດີສຳລັບພວກຂ້າພະເຈົ້າທີ່ບໍ່ມີລົມ. ພວກແມງບົ້ງທີ່ມີຂົນຫຍຸຍສີຂີ້ເທົ່າເບິ່ງຄືກັບບົ້ງຂາງຂຶບນັ້ນ ຄານໄປຄານມາຢ່າງພ້າວພັ່ງຢູ່ເທິງຮົ້ວ. ພວກຈີ່ໂກະທີ່ວ່ອງໄວປາດປຽວນັ້ນຢືນນິ້ງປານຕາຍຢູ່ເທິງໂງ່ນຫີນທີ່ຮ້ອນແຜດແລະພັບຕາຫນ່ວຍນ້ອຍໆໃສໆຂອງຕົນເພື່ອບໆຢູ່ຢ່າງໄຮ້ດງສາ. ພວກມັນມີຄວາມສົດຊື່ນຢ່າງລົ້ນເຫລືອຢູ່ພາຍໃຕ້ແສງແດດຂອງດວງອາທິດ. ພະຍາດກາລະໂລກບໍ່ແຕະຕ້ອງເກືອງສັດສາວາສິ່ງນ້ອຍໆເຫລົ່ານັ້ນຂອງພິພົບເລີຍ.

ທ່ານ ມິນໂຮຍເຊີ ເວົ້າ:

- ຕ້ອງຕ້ານທານກັບຄວາມສຸດໂຊມຂອງຮ່າງກາຍ.

ຂ້າພະເຈົ້າເຫັນພໍມືວໆ ຄືແນມຜ່ານມ່ານຫມອກນີ້, ທ່ານ ມິນໂຮຍເຊີ ໃຊ້ອົ້ງມືຄຸບເອົາຈີ່ໂກະໂຕຫນຶ່ງມາໄດ້ຢ່າງຄ່ອງແຄ້ວ ແລ້ວປ່ອນໃສ່ປາກກິນເລີຍ. ກິນແລ້ວ, ລາວກໍຍິ້ງປາກດຸ:

- ຫມູ່ບ້ານ ນາບູຄາດນີ້ມີເຮືອນຢູ່ສິບເກົ້າຫລັງ. ປະກົດວ່າຄົນໃນຈຳນວນສິບເອັດຫລັງເຮືອນຕາຍກັນຫມົດແລ້ວ.

ມື້ເວນນັ້ນ ປະກົດວ່າຍືດເຍື້ອນໄປຢ່າງບໍ່ມີຂອບເຂດ. ຄວາມງຽບສະຫງັດນັ້ນ ມັນເຕັ່ງຄົດດັ່ງຊາຕາກຳທີ່ພວມຄືບຄານ ແລະສຳແດງແຜງເດດລົງມາປົກຄຸມເອົາຫມູ່ບ້ານອັນອາພັບອັບຈົນທີ່ພວມກົກຫລົງລືມໄປນີ້. ສຽງໄອຢູ່ໃນເຮືອນຫລັງຕ່າງໆຄ່ອຍໆງຽບລົງໄປ. ທ່ານ ມິນໂຮຍເຊີ ເຂົ້າໄປກວດເບິ່ງສະພາບຢູ່ໃນບ້ານ. ຂ້າພະເຈົ້າບໍ່ໄວ້ວາງໃຈໃນການສັກຢາປ້ອງກັນຂອງລາວ, ດັ່ງນັ້ນຈຶ່ງຄຶດວ່າ ຈັ່ງໃດລາວກໍຕ້ອງກຶ້ມຊາກໄວ້ຢູ່ໃນຫັ້ນເປັນແນ່. ແຕ່ລາວຊ້ຳກັບຄືນມາ.

- ເຮີຍ, ບິນ, ເຈົ້າຍັງບໍ່ເປັນຫຍັງຕິ? ເອີ ເຈົ້າຮູ້ບໍ່ວ່າ ອີ່ລຸງເກົ້າ ມູຄາມ ຢູ່ເຮືອນຫລັງສຸດທ້າຍນັ້ນ ຍັງບໍ່ທັນຕາຍເທື່ອ, ຂ້ອຍຫາກໍມາແຕ່ຫັ້ນ.

- ຄືຈັ່ງວ່າລາງຮ້າຍນີ້ບໍ່ຈົບສິ້ນລົງໄປຈັກເທື່ອເວີຍ, - ຂ້າພະເຈົ້າເວົ້າເປັນສຽງຜ່າວໆຜ່ານ

ຣິມຝີປອັນແຫ້ງແລ້ງຂອງຄົນດ້ວຍຄວາມລຳຄານ. - ວາປາ ຫລື ມາຣີ? ຊີໂຊກຫລືຊີຊວຍ? ຊີລອດຫລືຊີຕາຍ?

ຂ້າພະເຈົ້າຫລັບຕາຢູ່ ແລະຮູ້ສຶກວ່າຈະເສຍສະຕິໃນບໍ່ຊ້ານີ້ແລ້ວ.

... ຊາວອິນເດຍຜູ້ຫນຶ່ງມີຫນວດກ້ອງຄາງກະໄຕຂາວຫງອກ, ເປືອຍໂຕນັ່ງເບິ່ງຊຸ່ຍຢ່າງເມົາມົວ, ສິ່ງສຽງດັງອ້ອຍອິ່ນຢູ່ທີ່ປະຕູເຮືອນຫລັງຫນຶ່ງພາຍໃຕ້ແສງແດດບ່ຽງບ່າຍຂອງແດງອາທິດທີ່ພວມຈະອັດສະດົງ. ຄອບງຽລາວກໍໄອຂຶ້ນແລ້ວຂາກຂີ້ເກຶ້ກຸ້ມລົງໃສ່ຂີ້ຊາຍ. ງູສອງໂຕ, ຄີງຍາວ, ມີລາຍກ່ານ, ຫົວມັນແຂງແລະມີຮອຍຮ້າວ ພວມເລືອອອກມາຈາກຫລືບຫີນກາບເງິນສີອິດກ້ອນຫນຶ່ງ, ມັນໄລ່ພວກຈີ່ໂກະທີ່ບໍ່ມີຄວາມຜິດຫຍັງນັ້ນໃຫ້ແລ່ນຄ້ອກໄຄ່ວຢູ່, ມັນພຸ່ງຕົວຜ່ານຈາກຂ້າພະເຈົ້າໄປທາງອີ່ລຸງເກົ້ານັ້ນ. ພວກມັນຍົກຫົວ, ຕັ້ງຕົວຊື່ຂຶ້ນຢູ່ຕໍ່ຫນ້າລາວ, ມັນກິ່ງຄົວ, ພຶງຄໍສອງຂ້າງອອກແລ້ວເລີ່ມຕົ້ນຕົງຄີງຢ່າງມີຈັງຫວະ.

ແຕ່ສິ່ງນັ້ນອາດແມ່ນພາບຫລອນທີ່ຂ້າພະເຈົ້າຄາດຄຶດຂຶ້ນມາໃນຄາວຫລົງສະຕິໄປນັ້ນກໍເປັນໄດ້?

ຄ່ຳຄືນທີ່ເຕັມໄປດ້ວຍຄວາມວິຕົກກັງວົນ ໄດ້ຜ່ານພົ້ນໄປອີກຄືນຫນຶ່ງ, ດວງດາວຕ່າງໆຫັບຫາຍໄປໃນທ້ອງຟ້າສີກຸຫລາບຂອງຍາມຮຸ່ງອາລຸນ. ດວງອາທິດທີ່ຮ້ອນຈັດແລະເສີຍເມີຍນັ້ນພັດຄ່ອຍໆລອຍຕົວຂຶ້ນເທິງຫມູ່ບ້ານທີ່ງຽບສະຫງັດຂອງຄົນທີ່ຕາຍແລ້ວນັ້ນ. ຂ້າພະເຈົ້າບໍ່ເປັນໄອ, ຫົວແຫ້ງຈົນຄໍຈະໄຫມ້. ທ່ານ ມິນໂຣຍເຊີ ປຸກຂ້າພະເຈົ້າໃຫ້ຕື່ນຂຶ້ນມາ, ລາວຢືນຍືດຄີງຂຶ້ນຢ່າງງຽບໆຄືກັບພວມຕຽມຕົວຈະເຄື່ອນທັບ.

- ປີນ, ຂໍອວຍພອນແດ່ເຈົ້າ. ເຈົ້າຍັງບໍ່ທັນເປັນຫຍັງໄປກໍຍ້ອນໄດ້ສີດຢາປ້ອງກັນ: ພະຍາດກາລະໂລກຢູ່ນາບູຄາດນີ້ ເປັນປະເພດ ວາປາ. ດຽວນີ້ ພວກເຮົາຕ້ອງຫນີຈາກນີ້ໄປ... ລາວຊູມືຂຶ້ນ. - ລົມພັດລົງມາແຕ່ພູປອດໂປ່ງທີ່ສຸດ...ວິເສດ. ພວກເຮົາຈະກໍ່ກອງໄຟຂຶ້ນຈູດພິດກອງໄມ້ທີ່ຢູ່ຂ້າງຕູບນັ້ນ. ຈຳເປັນຕ້ອງຜ່ານແປວໄຟໄປ. ຊາວອິນເດຍເວົ້າວ່າ ຄວາມຕາຍບໍ່ກ້າແຕະຕ້ອງເຖິງສິ່ງທີ່ຜ່ານການລ້າງສ່ວຍຄວາມເປື້ອນເປີ ອອກໄປດ້ວຍແປວໄຟ...ປີນ, ພວກເຮົາຈົ່ງລອງເບິ່ງວ່າມັນຈະເປັນແນວໃດ?

ບາງທີທ່ານ ມິນໂຣຍເຊີ ກໍອາດຈະໃຫລເວົ້າອອກມາ, ແຕ່ຂ້າພະເຈົ້າກໍບໍ່ຂັດຂືນການກະ

ທຳອັນບ້າບໍ່ຄໍແຕກນີ້. ລາວກົ້ງວງວຽນໆບໍ່ແລ້ວບໍ່ເລົ່າຢູ່ກັບກອງໄມ້ອໍ້ແລະດົ້ນພືນຕ່າງໆ, ໃນທີ່ສຸດແປວໄຟທີ່ບຶກບືນແລະຂືວກຸ້ມນັ້ນກໍທົ່ງເປັນແປວພວດໆຂຶ້ນມາ. ກຸ່ມຄວັນແຫນ້ນອັດບິດບັງເອົາດວງອາທິດໄວ້ຈົນຫມົດ. ທ່ານ ມິນໂຮຍເຊີ ຈັບມືຂ້າພະເຈົ້າແລ້ວພວກຂ້າພະເຈົ້າກໍກ້າວເຂົ້າໄປໃນກຸ່ມຄວັນນັ້ນ. ແປວໄຟເລຍໃບຫນ້າຂອງຂ້າພະເຈົ້າເຮັດໃຫ້ຜົມແລະສົ້ງເສື້ອໄຫມ້ແຫ້ມໄປສ່ວນຫນຶ່ງ. ຫົວສະຫມອງຂອງຂ້າພະເຈົ້າວິນວຽນເປັນເວົ່ງໆວ່າງໆ...ຂ້າພະເຈົ້າກັ້ນໃຈຕາມຄວາມສາມາດແລະຄຶດວ່າ: "ຖ້າລົ້ມລົງໄຟກໍຄົງໄຫມ້ຕາຍຄັກໆ..."

ຄວາມຈິງແລ້ວຂ້າພະເຈົ້າຖືວ່າແຫນງສູ້ລົ້ມລົງໃຫ້ໄຟໄຫມ້ຕາຍໄປໃນນະຮົກແຫ່ງນີ້ ກໍຍັງດີກວ່າທີ່ຈະຕ້ອງມີຊີວິດຢູ່ໃນໂລກຂອງພະຍາດກາລະໂລກທີ່ຫນ້າອະເຫຍືອງນີ້ອີກຄັ້ງຫນຶ່ງ.

ແຕ່ລຳແຂນອັນແຂງແຮງຂອງທ່ານ ມິນໂຮຍເຊີ ກໍຊີວານຊູແລະຈູງຂ້າພະເຈົ້າຜ່ານແປວໄຟທີ່ພວມລຸກລວບໆອອກໄປຍັງຟາກເບື້ອງນັ້ນໄດ້ຢ່າງໄວວາ. ຄວາມເຢັນອອນຊອນຢ່າງພິດປົກກະຕິຂອງອາກາດອັນຊຸ່ມຊື່ນສົດໃສໄດ້ມາລູບໄລ້ເອົາຂ້າພະເຈົ້າ. ຜ່ານມ່ານອາກາດທີ່ເສາະໃສຄືແກ້ວຂອງຮຸ່ງອາລຸນທີ່ຜ່ອງໃສນັ້ນ, ຂ້າພະເຈົ້າແນມເຫັນຈອມພູທີ່ຂາວຍ້ອນຫິມະນັ້ນຢູ່ເບື້ອງຫລັງວົງສີຂຽວຄຶ້ມຂອງເຂດປ່າດ້າວວົງກົດ, ຂ້າພະເຈົ້າຮ້ອງຂຶ້ນຢ່າງອ່ອນເພຍແລ້ວລົ້ມຟຸບລົງຍ້ອນຫມົດສະຕິ.

## ຕອນທີສີ່

### I

ປະກົດວ່າຂ້າພະເຈົ້າໄດ້ນອນຢູ່ເທິງສາດພູກແຂງເປັນເວລານານໂພດ. ແອວຂອງຂ້າພະເຈົ້າເຈັບປວດເຫລືອຄະນາ. ເມື່ອເຫນັງຕຶງ, ຂ້າພະເຈົ້າຮູ້ສຶກເຈັບປວດຈົນບໍ່ກ້າຈະມືນຕາຂຶ້ນ. ປາກຂ້າພະເຈົ້າຂົມຝາດຕັນປົກ. ຂ້າພະເຈົ້າແນມເຫັນໃບຫນ້າຫລອກແຫລກຂອງ ກລົບ ປະກົດ ພໍເປັນລາງໆຂຶ້ນມາໃນເງົາມືດສີນ້ຳເງິນແຫ່ງລາຕີການ, ໂຄມໄຟຢູ່ເບື້ອງຫລັງມ່ານກັ້ງປົກບ່າງຂອງໂຮງສະແດງທີ່ບໍ່ມີຮູບຮ່າງນັ້ນສາຍແສງໃສ່ໃບຫນ້າດັ່ງກ່າວແລະກລົບພວມຍິ້ມຫົວ.

- ໂດດສາ ບິນ, ແລ້ວເຈົ້າຈະຊະນະເລີດອີກຄັ້ງຫນຶ່ງ...

- ກູບໍ່ໄຊ້ຊາດ! - ຂ້າພະເຈົ້າແຜດສຽງຂຶ້ນ.

ໃນຂະນະດຽວກັນນັ້ນ, ຝາມືອັນແຂງແຮງທັງຄູ່ກໍໂຊມຫົວຂອງຂ້າພະເຈົ້າໃຫ້ເງີຍຂຶ້ນ:

- ດື່ມຈັກກືນສາ, ປິນ. ນີ້, ຂ້ອຍບອກໃຫ້ກືນນ່າ. ນ້ຳນີ້ແຊບໆ...

ພັກແຂ້ວທັງສອງເບື້ອງຂ້າພະເຈົ້າສັ່ນດຸບບ່ວງເຫລັກຢູ່ກັບໆ, ຂ້າພະເຈົ້າກືນນ້ຳຮ້ອນທີ່ມີກິ່ນຫມາກບົກແລະຫົວຂີ້ຫມິ້ນນັ້ນລົງໄປບ່ວງຫນຶ່ງ. ໃບຫນ້າຂອງກລີບກໍຫາຍວັບໄປ ...

- ມືນຕາຂຶ້ນເບິ່ງ, ປິນ! - ສຳນວນທີ່ເຕັມໄປດ້ວຍອຳນາດນັ້ນພັດອອກຄຳສັ່ງມາອີກ.

ຜ່ານຈາກປ່ອງປະຕູທີ່ໄຂລະໄວ້ນັ້ນ ຈະແນມເຫັນບັນດາຈອມພູມໍລະກົດປະກົດຂຶ້ນມາແຕ່ໄກໆ. ຕຽງທີ່ຂ້າພະເຈົ້າພວມນອນຢູ່ນັ້ນ ກືກວາງໄວ້ຂ້າງຝາ, ທ່ານ ມິນໂຣຍເຊີ ແລະຍິງສາວຮ່າງສູງຄົນຫນຶ່ງສວມເສື້ອຄຸມຂາວພວມຢືນຢູ່ຂ້າງຫັ້ນ.

- ປິນ, ເຈົ້າຮູ້ສຶກເປັນຈັ່ງໃດ? - ທ່ານ ມິນໂຣຍເຊີ ຖາມ, ເອົາມືມາຊູນມືຂອງຂ້າພະເຈົ້າຢູ່ນອກຜ້າຫົ່ມ.

- ໄຄແດ່ແລ້ວ, - ຂ້າພະເຈົ້າຕອບຄ່ອຍໆໂດຍທີ່ບໍ່ທັນຮູ້ດີວ່າຕົນຍັງລະເມີຢູ່ຫລືຕັ້ງສະຕິໄດ້ແລ້ວ. - ຂ້ອຍເປັນຫຍັງໄປ? ພະຍຸກາລະໂລກຫວະ?

- ບໍ່, ພຽງແຕ່ມີປະຕິກິລິຍາບາງຢ່າງໃນຮ່າງກາຍຍ້ອນການສີດເຊື້ອຕ້ານວາບາ ແລະມາຣີຊີ່ງດອກ. ປິນເອີຍ, ເຈົ້າຫວິດແລ້ວລະ. ອີກສອງມື້ເຈົ້າກໍຈະແຂງແຮງດີ ແລະສາມາດໄປທ່ອງທ່ຽວໄດ້ໃນທຸກແຫ່ງບໍ່ວ່າແຕ່ຈະເປັນບ້ານ ນາປູຄາດໃດໆ ກ້າເຈົ້າຫາກຕ້ອງການ. - ທ່ານ ມິນໂຣຍເຊີ ຍິ້ມຫົວ ແລະງວາກໄປຫານາງສາວຄົນນັ້ນ: - ໃຫ້ປິນຢູ່ນີ້ນຳພວກເຮົາເນາະ? ເຈົ້າຄຶດຈັ່ງໃດ, ລີເຢີ?

- ທ່ານ ສາດສະດາຈານ, ສະຖານທີ່ຂອງພວກເຮົານີ້ກໍບໍ່ເກີງຂັ້ນຂີ້ຮ້າຍ. - ລີເຢີຕອບຢ່າງນິ້ມນວນ.

ທ່ານ ມິນໂຣຍເຊີ ເວົ້າຕໍ່ໄປວ່າ:

- ປິນ, ເຈົ້າຈະໄດ້ດຳລົງຊີວິດຢູ່ທີ່ນີ້, ອີລຸງ ໂຫຈະບົວລະບັດເຈົ້າ ຈົນກ່ວາເຈົ້າຈະແຂງແຮງດີ ...

- ຂໍຂອບໃຈ ທ່ານ ສາດສະດາຈານ, - ຂ້າພະເຈົ້າເວົ້າໄດ້ພຽງສ່ຳນັ້ນ.

ຂ້າພະເຈົ້າຟື້ນສະຕິຂຶ້ນມາຢູ່ພາຍໃນສະຖາບັນຄົ້ນຄ້ວາວິທະຍາສາດ ຂອງສາດສະດາຈານ ມິນໂຣຍເຊີ, ບ່ອນທີ່ເພິ່ນນຳເອົາຂ້າພະເຈົ້າມາແຕ່ ນາປູຄາດຄືຈັ່ງຊັ້ນແລ້ວ.

ອີລຸງໂຫ, ຊາວຈີນຜູ້ຄ່ອງແຄ່ວແລະມີມາລະຍາດທີ່ສຸດຜູ້ນັ້ນໄດ້ຈັດແຈງອາຫານເຊົ້າແຊບໆ ຄາບຫນຶ່ງໃຫ້ຂ້າພະເຈົ້າແລະມີຄວາມປະທັບໃຈໃນເມື່ອໄດ້ຍິນຂ້າພະເຈົ້າເວົ້າພາສາແມ່ຂອງລາວກັບລາວສອງສາມຄວາມ. ຕໍ່ແຕ່ນັ້ນມາ, ຂ້າພະເຈົ້າກໍໄດ້ຮັບຄວາມໄວ້ວາງໃຈຈາກລາວ.

ເປັນເວລາສອງມື້ຕິດຕໍ່ກັນທີ່ລາວບໍ່ໄດ້ພີກອອກຈາກຂ້າພະເຈົ້າໄປແລະບົວລະບັດຂ້າເຈົ້າຄືກັນກັບບົວລະບັດເດັກນ້ອຍຜູ້ຫນຶ່ງ. ຜ່ານຈາກລາວນັ້ນເອງ ຂ້າພະເຈົ້າສາມາດຮັບຮູ້ໄດ້ກ່ຽວກັບຄວາມເປັນມາຈໍານວນຫນຶ່ງຢູ່ພາຍໃນສະຖາບັນນີ້.

ສະຖາບັນນີ້ຕັ້ງຢູ່ແຄມຝັ່ງເຊທິດເຫນືອ ພາກຮັງກູນ, ແປະກັບເສັ້ນທາງທີ່ເນັ່ງໄປສູ່ທ່າກໍາປັ່ນບິນອ່າວແບັນການທີ່ຢູ່ທິດຕາເວັນຕົກຊາຍແດນຂອງໄຫນັ້ນໂລດ. ຢູ່ແຫ່ງນີ້, ເຂົາເຈົ້າເອີ້ນທ່ານ ມິນໂຮຍເຊີວ່າ "ສາດສະດາຈານໆ" ທັງນີ້ກໍເພາະເພິ່ນມົວສຸມຢູ່ກັບພວກງູພິດຊະນິດຕ່າງໆຢູ່ໃນຫ້ອງທົດລອງຕະຫລອດມື້, ແລະເຂົາເຈົ້າກໍຖືກັນວ່າເພິ່ນເປັນຜູ້ຮັ່ງມີທີ່ສຸດ.

ຮອດມື້ກ່ອນສາມ, ຂ້າພະເຈົ້າກໍຮູ້ສຶກວ່າຕົນມີຄວາມແຂງແຮງດີແລະສາມາດຊອກຮູ້ກ່ຽວກັບສະຖາບັນຄົ້ນຄ້ວາວິທະຍາສາດນີ້ໄດ້ເລິກເຊິ່ງກວ່າເກົ່າແລ້ວ.

ສະຖາບັນເປັນຕຶກຫລັງຫນຶ່ງສ້າງດ້ວຍຫີນ, ໃນນັ້ນມີຫ້ອງທົດລອງແລະຫ້ອງຕ່າງໆຂອງສາດສະດາຈານ, ນອກນັ້ນຍັງມີເຮືອນນ້ອຍຊັ້ນດຽວຈໍານວນຫນຶ່ງ, ນາງ ລີເຢີ ຜູ້ຊ່ວຍວຽກຂອງສາດສະດາຈານ, ຜູ້ຂັບລົດເຊິ່ງເປັນຊາວທ້ອງຖິ່ນແລະຄົນໃຊ້ຊາວຈີນຈໍານວນຫນຶ່ງດໍາລົງຊີວິດຢູ່ໃນເຮືອນນ້ອຍເຫລົ່ານັ້ນ. ຕໍ່ຈາກຝາກໍາແພງສູງນັ້ນໄປແມ່ນສວນຕົ້ນໄມ້ຂອງເຂດອາກາດຮ້ອນທີ່ກວ້າງຂວາງ, ນະທີ່ນີ້, ສາດສະດາຈານລ້ຽງງູພິດທຸກງປະເພດໄວ້.

- ບິນ, ຂ້ອຍພວມຄົ້ນຄ້ວາພິດງູຊະນິດຕ່າງໆ, - ທ່ານ ມິນໂຮຍເຊີ ເວົ້າກັບຂ້າພະເຈົ້າໃນຂະນະທີ່ພາຂ້າພະເຈົ້າເຂົ້າໄປໃນສວນ. - ຂ້ອຍຄິດວ່າອາດຈະສາມາດໃຊ້ມັນເຂົ້າໃນການປົວພະຍາດຕິດແປດຈໍານວນຫນຶ່ງ, ພິດງູທີ່ພວກເຮົາພວມຄົ້ນຄ້ວາຢູ່ນີ້ແມ່ນໃຊ້ເຂົ້າໃນການປຸງແຕ່ງຢາຕ້ານງູດອດ, ຕ້ານງູພິດຊະນິດຕ່າງໆທີ່ເຈົ້າພວມເຫັນຢູ່ຕໍ່ຫນ້ານີ້ເປັນຕົ້ນຕໍ ...

ພວກເຮົາຍ່າງໄປຕາມເສັ້ນທາງນ້ອຍຕ່າງໆເຊິ່ງສອງຂອກຂ້າງຂອງມັນມີຄອກລ້ຽງງູທີ່ເຮັດດ້ວຍດີ້ວເຫລັກຕັ້ງລຽນລາຍກັນຢູ່.

- ເຈົ້າຮູ້ບໍ່ຢູ່ອິນເດຍແຕ່ລະປີມີຄົນຕາຍຍ້ອນງູກັດເປັນພັນໆຄົນ, ສ່ວນຢູ່ທາງເບຣຊິນ

ນັ້ນຈຳນວນຄົນທີ່ຖືກງູກັດໃນໄລຍະປີຫນຶ່ງມີເຖິງຊາວສີ່ພັນຄົນ. ຄວາມຈິງແລ້ວວິທີປ້ອງກັນທີ່ດີທີ່ສຸດຄືເປີດຂະບວນດັບສູນງູ, ແຕ່ເມື່ອຄົນຫາກຖືກງູກັດໄປແລ້ວ ກໍຕ້ອງກອບກູ້ເອົາເຂົາເຈົ້າດ້ວຍວິທີສີດຢາ ...

ສວນຂອງ "ສາດສະດາຈານງູ" ສ້າງຄວາມປະຫລາດໃຈໃຫ້ແກ່ຂ້າພະເຈົ້າ. ສ່ວນຫນຶ່ງຂອງສວນແມ່ນປູກຕົ້ນໄມ້ຊະນິດຕ່າງໆ, ມີຮ່ອມທາງທຽວ, ມີຕົ້ນດອກໄມ້ປູກໄວ້ເປັນຕອນໆ ແລະມີສະນ້ຳນຳອີກ. ນ້ຳໃນສະຕ່າງໆເຫລົ່ານັ້ນ ລົ້ນໄຫລເປັນນ້ຳຕົກຕາດດັງເສາະໃສມ່ວນຫູ. ນະທີ່ນີ້, ນາງລີເຢີຊີໃຫ້ຂ້າພະເຈົ້າເບິ່ງດອກໄມ້ແລະກົກໄມ້ໃບຫຍ້າບາງຊະນິດເຊິ່ງຂ້າພະເຈົ້າໄດ້ຍິນເອີ່ຍເຖິງມັນແຕ່ສະເພາະໃນໂມງຮຽນພຶກສາຊາດເທົ່ານັ້ນ. ກ່ອນນີ້, ຂ້າພະເຈົ້າໄດ້ເຫັນກ້ວຍແລະຫມາກນັດແຕ່ມາເຖິງປະຈຸບັນນີ້ຈຶ່ງຮູ້ຈັກວ່າໃບຫມາກນັດສາມາດໃຫ້ເສັ້ນໄຫມຢ່າງດີແກ່ການທໍຜ້າແລະເສື່ອປົກບ່າງຂອງພໍ່ຄົວໂຫນັ້ນ ແມ່ນຕັດດ້ວຍ "ແພຫມາກນັດ".

ຂ້າພະເຈົ້າຊື່ນຊົມກັບພັນ "ຕົ້ນໄມ້ຂອງຊາວທັດສະນາຈອນ" ນັ້ນເປັນຍິ່ງ. ໃນອຸທິຍານນີ້ມີທາງເສັ້ນຫນຶ່ງເຊິ່ງປູກຕົ້ນໄມ້ຊະນິດນີ້ໄວ້ສອງຟາກຂ້າງ, ຍອດຂອງຕົ້ນໄມ້ສູງຊະນິດນີ້ເບິ່ງແລ້ວຄືກັນກັບພັດລົມໃຫຍ່ໃບຫນຶ່ງລວມມີໃບຍາວໆລຽນຢູ່ເປັນສອງແຖວຄືໃບພ້າວ. ແຕ່ຕົ້ນຂອງມັນຊ້ຳບໍ່ແມ່ນພັນຕົ້ນພ້າວ, ມັນເປັນຄະນາຍາດຂອງຕົ້ນກ້ວຍ. ບັນຍາກາດຢູ່ໃນສວນຫອມກຸ້ມຄືກັບຮ້ານຄ້າຂາຍເຄື່ອງສຳອາງແຫ່ງຫນຶ່ງ. ພືດເຂດອາກາດຮ້ອນຊະນິດຕ່າງໆເຊັ່ນຂີງ, ຫມາກແຫນ່ງ, ວານີ, ລ້ວນແຕ່ປົ່ງຊ້ອນໆກັນຂຶ້ນ. ບັນດາຕົ້ນດອກເອື້ອງໃຫຍ່ຕ່າງປະຫລາດພ້ອມດ້ວຍດອກດວງອັນແປກໆຂອງມັນສົ່ງກິ່ນຫອມອອກມາກຸບກຸ້ມຄືກັບນ້ຳຫອມຊັ້ນດີຕັ້ງພັນຫຼອດ ໄຂຜາອອກຊວນໃຫ້ທຸກຄົນຕ້ອງຝັນໄຝ່ເມົາມົວ. ເວົ້າແທ້ແລ້ວຕົ້ນ ວານີ ກໍເປັນເຄືອຍາດດຽວກັນກັບກົກເອື້ອງ. ກ່ອນນີ້ຂ້າພະເຈົ້າບໍ່ທັນຮູ້ຈັກເລື່ອງນີ້ເລີຍ. ຂ້າພະເຈົ້າຖືເປັນເລື່ອງທີ່ຫນ້າສົນໃຈຢ່າງຍິ່ງເມື່ອເຫັນຫມາກກາກາວ ປົ່ງອອກມາຈາກຕົ້ນໂດຍກົງແຕ່ບໍ່ແມ່ນປົ່ງອອກຈາກງ່າ. ນັ້ນເປັນຕົ້ນໄມ້ຊະນິດຫນຶ່ງທີ່ບໍ່ສູງປານໃດມີໃບສີຂຽວຊ້ຳ. ຫມາກສຸກຂອງມັນເປັນສີແດງຫລືສີຫນັງຫມາກກ້ຽງ, ໃຫຍ່ກວ່າຫມາກແຕງຫນ້ອຍຫນຶ່ງ, ເບື້ອງໃນຂອງມັນມີແກ່ນຫລາຍ. ນັ້ນລະຄືຕົ້ນກາກາວ ທີ່ເຂົາໃຊ້ປຸງເປັນນ້ຳມັນກາກາວ, ກາກາວຝຸ່ນແລະໂຊໂກລາ. ກ່ອນຍຸກໂກລຳໂບປະຊາຊົນເຂດທະວີບອາເມລິກາໃຊ້ແກ່ນກາກາວນີ້ ເພື່ອ

ປຸງແຕ່ງເປັນເຄື່ອງດື່ມແລະຕັ້ງຊື່ໃຫ້ມັນວ່າ "ໂຊໂກລາເຕີ" ຈາກນັ້ນຈຶ່ງມີຊື່ທີ່ຮຽກກັນວ່າ "ໂຊໂກລາ".

ພາກສ່ວນຫນຶ່ງຂອງສວນອຸທິຍານນັ້ນເປັນປ່າຕົ້ນໄມ້ເຂດອາກາດຮ້ອນ ທີ່ຄືງຕິວຢູ່ໃນສະພາບແຫ່ງຄວາມຮົກເຮື້ອຂອງສະໄຫມຈົນລົມປະກົນບູຮານ. ຢູ່ແຫ່ງນັ້ນມີຕົ້ນໄມ້ເຄືອຍາດຕົ້ນພ້າວເປັນຈຳນວນຫລວງຫລາຍແລະບໍ່ມີຕົ້ນໄມ້ປະເພດຕົ້ນສົນພໍ່ຕົ້ນເລີຍ. ພວກຕົ້ນໄມ້ເຄືອຍາດພ້າວຕາວເປັນບໍ່ເກີດແຫ່ງຜົນປະໂຫຍດຂອງຊາວທ້ອງຖິ່ນ. ຕົ້ນໄມ້ປະເພດຕົ້ນຕາວ, ພ້າວນັ້ນ, ທັງໃຊ້ປຸງເປັນອາຫານ, ເຮັດວັດຖຸປະກອນການຜະລິດ, ທັງເຮັດເປັນດ້າຍທໍຜ້າ. ໃນປຶດກະວີນິພົນຂອງອິນເດຍທີ່ມີຊື່ວ່າ "ບຣາຄາຣາດ" ນັ້ນໄດ້ກ່າວເຖິງການນຳໃຊ້ຕົ້ນໄມ້ປະເພດນີ້ເຖິງສາມຮ້ອຍຫ້າສິບກ່ວາຢ່າງ. ຂ້າພະເຈົ້າໄດ້ພົບເຫັນຕົ້ນໄມ້ປະເພດເຄືອຍາດພ້າວ - ຕາວຊະນິດທີ່ມີຮາກປົ່ງຢູ່ເທິງດິນເຫັນບັນດາຕົ້ນຫມາກແຫນ່ງ, ຕົ້ນດອກເອື້ອງ, ຕົ້ນແຄ່ນາງຊະນິດຕ່າງໆ, ຕົ້ນຫມາກນັດຝ້າຍແລະຢຸກໂກ. ພວກເຄືອເຂົາທີ່ກົ່ງວຂຶ້ນຕາມຕົ້ນໄມ້ຫລືຍັ່ງຄາດຈາກກົກໄມ້ນີ້ໄປສູ່ກົກໄມ້ອື່ນນັ້ນ ໄດ້ເຮັດໃຫ້ເກີດຄວາມຮົກເຮື້ອຢ່າງບໍ່ສາມາດບຸຫມົ້ນພົ້ນຜ່ານໄປໄດ້. ຢູ່ແຫ່ງນີ້ຍາມໃດກໍໄດ້ຍິນສຽງຮ້ອງສຽງໂກກຂອງຝູງລີງທີ່ພວມເຕັ້ນໄປເຕັ້ນມາຢູ່ຕາມສາຂາງ່າໄມ້ແລະສຽງຮ້ອງອື່ນອອຍຂອງນົກນາງຊະນິດຢູ່ສະເຫມີ.

ຕົ້ນໄມ້ ກາຝາກປະເພດຕົ້ນໄຮ ແບັນການທີ່ເປັນເຄືອນຍາດດຽວກັບກົກໄຮຍ້ອຍນັ້ນໄດ້ກໍ່ພາບສຳນຶກອັນເລິກເຊິ່ງໃຫ້ແກ່ຂ້າພະເຈົ້າ. ພວກນົກຊະນິດຕ່າງໆໂຮຍແກ່ນຂອງມັນໄວ້ຕາມງ່າໄມ້, ແລ້ວພວກມັນກໍເລີ່ມປົ່ງຂຶ້ນໃນງ່າໄມ້ຊະນິດອື່ນໂດຍບໍ່ຍອມແຕະຕ້ອງເຖິງດິນເລີຍ, ບໍ່ຕ່າງຫຍັງກັບຄອນໆເຮົາກໍເຫັນຕົ້ນເປືອຍຂາວ ທີ່ປົ່ງຂຶ້ນມາຕາມຫລັງຄາຫລືຫລືບຝາເຮືອນທີ່ສະຫລັກຫັກພັງນັ້ນແລ້ວ. ຕໍ່ມາລຳຕົ້ນຂອງມັນກໍມີຮາກຍາວໆປົ່ງອອກມາຫ້ອຍຢູ່ເທິງອາກາດ. ພວກມັນຂຶດຂໍ້ງຕົວເຂົ້າແລ້ວຍ່ອນຕະຊະລົງລຸ່ມຄືກັບຝູງງູໃຫຍ່. ເມື່ອຢັ່ງຮອດດິນມັນກໍຢັ່ງຈັບໄວ້ແຫນັ້ນໆແລະກາຍເປັນເສົາອັນຫມັ້ນຄົງຄ້ຳພຸ່ມຕູມພູມອັນໃຫຍ່ຫລວງ ຂອງຕົ້ນໄວ້. ຕົ້ນໄມ້ທີ່ໃຫ້ໃນພັນຂອງມັນອາໃສມີຊີວິດຢູ່ໃນເບື້ອງຕົ້ນນັ້ນ ກໍເລີຍຜຸດອອກໄປ ແລະກໍເຫລືອໄວ້ພຽງຜະລິດຕະພັນທີ່ຫນ້າງືດງໍ້ຂອງທຳມະຊາດ ເຖິງຂັ້ນວ່າເຂົາເຈົ້າສາມາດສ້າງເຮືອນຊັ້ນດຽວສູງໆຢູ່ໃຕ້ຮົ່ມຂອງມັນໄດ້ບໍ່ຈັກວ່າເທົ່າໃດຫລັງ.

ຖ້າເບິ່ງແຕ່ພຽງຜິວເຜີນກໍປະກົດວ່າ ນະທີ່ນີ້ບໍ່ມີຫຍັງເປັນອັນຕະລາຍຕໍ່ມະນຸດ. ຈັ່ງແມ່ນເປັນຫນ້າຕົກອົກຕົກໃຈຍິ່ງ ເມື່ອໄດ້ຊື່ນຊົມຄວາມງາມອັນເຄັ່ງຂຶມຂອງຕົ້ນໄມ້ໃບຫຍ້າແລະຄວາມມິດງຽບອັນລ້ຳເລີດນີ້.

ແຕ່ໃນພຸ່ມໄມ້ໃບຫຍ້າເຫລົ່ານັ້ນເຕັມປົກແຕ່ຮັງງູ, ມີງູທຸກຊະນິດໃນໂລກເອົາໂລດ. ຊະນິດທີ່ເລືອຄານຢູ່ເທິງຕົ້ນໄມ້ແມ່ນຖືກຂັງໄວ້ໃນຄອກ. ສ່ວນຊະນິດອື່ນໆທີ່ເຫລືອຢູ່ນັ້ນກໍຖືກລ້ອມໄວ້ດ້ວຍຮົ້ວເຊິ່ງເຂົາເຈົ້າສາມາດສັງເກດເບິ່ງມັນໄດ້ຕາມໃຈ.

ທ່ານ ມິນໂຮຍເຊີ ສະເຫນີໃຫ້ຂ້າພະເຈົ້າເປັນຄົນຍາມສວນ. ຂ້າພະເຈົ້າກໍຮັບປາກ. ເພິ່ນເອງໄດ້ແນະນຳຂ້າພະເຈົ້າໃຫ້ຮູ້ຈັກວິທີບົວລະບັດສັດປະເພດເລືອຄານນີ້ສອງສາມເທື່ອ.

ທ່ານ ມິນໂຮຍເຊີ, ນາງ ລີເຢີ ແລະຂ້າພະເຈົ້າໃສ່ເກີບໂບກຢາງແລະແຕ່ລະຄົນຈັບໄມ້ຄ້ອນເທົ້າພິເສດອັນຫນຶ່ງເຊິ່ງມີງ່າມຢູ່ທາງປາຍ. ສາດສະດາຈານຫມົ້ນເຂົ້າໄປຫາບ່ອນທີ່ມີພຸ່ມໄມ້ໃບຫຍ້າປົ່ງຂຶ້ນມາຢ່າງຮົກເຮື້ອນັ້ນຄືກັບນາຍພານຜູ້ຊະຫຍັນຄົນຫນຶ່ງ. ຈະຕ້ອງຊອກຄົ້ນຢູ່ໃຕ້ຫລີບຫີນ, ຊອກຫາຮັງງູຈົນພົບແລ້ວລໍ້ພວກມັນອອກມາ. ເຂົາເຈົ້າໃຊ້ໄມ້ເທົ້າປາຍງ່າມກົດຫົວງູລົງດິນ ແລະເມື່ອມັນຂົດໂຄ້ງເຂົ້າແລ້ວກໍກຳຮັດເອົາຄໍມັນ ແລ້ວກຸ້ມມັນເຂົ້າໄປໃນກະເປົາປ່ານ. ສາດສະດາຈານປະຕິບັດທຸກຢ່າງເຫລົ່ານັ້ນໄດ້ຢ່າງຄ່ອງແຄ້ວ. ນາງ ລີເຢີກໍເຮັດໄດ້ບໍ່ຕ່ຳແຕ້ມກວ່າເພິ່ນເລີຍ. ຂ້າພະເຈົ້າກໍບໍ່ຢາກຕ່ຳແຕ້ມຜູ້ໃດ. ສາດສະດາຈານພໍອົກພໍໃຈທີ່ສຸດໃນເມື່ອເຫັນຂ້າພະເຈົ້າຈັບງູຊະນິດຕ່າງໆທີ່ເກີດແນ່ແພ່ລູກຂຶ້ນມາຢ່າງເສລີ ຢູ່ໃນສວນອຸທິຍານແຫ່ງນີ້ເປັນຄັ້ງທຳອິດ ໂດຍບໍ່ມີຄວາມຢ້ານກົວຫຍັງເລີຍ.

ຂ້າພະເຈົ້າຈັບງູສີແດງຈ່າງສອງໂຕໄດ້ ແລະພະຍາຍາມລາກໂຕທີສາມອອກຈາກຫລືບຫີນຂຶ້ນມາ.

-ບີນ, ເຈົ້າແຫຍ່ຖືກຮັງງູ ເດລີໂອບີເຊີ ແລ້ວໃດຫັ້ນ. -ນາງ ລີເຢີ ຍ່າງມາໃກ້ຂ້າພະເຈົ້າແລ້ວເວົ້າ.

-ຍານາງ, ຂ້ອຍຍັງບໍ່ເຂົ້າໃຈໃນສິ່ງທີ່ນາງຢາກເວົ້າ, -ຂ້າພະເຈົ້າຕອບຢ່າງສຸພາບແລະແນມເບິ່ງດວງຕາດຳເຫລື້ອມທັງຄູ່ຂອງນາງ.

-ງູເດລີໂອບີເຊີ ແທ້ໆໃດຫັ້ນ, -ນາງລີເຢີ ຍິ້ມຫົວຢ່າງອ່ອນນວນ. -ເຈົ້າບໍ່ຢ້ານຫວະ?

- ຢ້ານຊັ້ນຫວະ? ສຳລັບຂ້ອຍແລ້ວ, ຄວາມຢ້ານກົວເປັນພຽງເສດຊາກຢ່າງຫນຶ່ງທີ່ຂັດຂວາງການຕໍ່ສູ້ກັບທຳມະຊາດຂອງຄົນ. - ຂ້າພະເຈົ້າຕອບນາງ ລີເຢີຢ່າງຄ່ອນຄົນໂດຍໄດ້ເວົ້າຫລໍາຄວາມເກົ່າທີ່ "ລາຊາຫມາໄນ" ໄດ້ເວົ້າມາເມື່ອກ່ອນນີ້.

## II

ນາງ ລີເຢີ ໄດ້ຊຶດຊ່ວຍຂ້າພະເຈົ້າໃຫ້ມີຄວາມຊິນເຄີຍກັບຫນ້າທີ່ພິສະດານຂອງຂ້າພະເຈົ້າ. ທຸກໆເຊົ້າໃດ, ລຸງ ຫລີ, ຊາວຈີນ ຜູ້ຮ່າງນ້ອຍແລະວ່ອງໄວນັ້ນ ກໍກວດແຜ້ວເສັ້ນທາງຕ່າງໆຢູ່ໃນສວນ, ຫລັງຈາກນັ້ນ ພວກເຮົາກໍຫາຈັບງູຊະນິດຕ່າງໆທີ່ສາດສະດາຈານກຳນົດໃຫ້ແລ້ວນຳເອົາສິນບັດປະເສີດທີ່ຮ້ອງອຶດໆອ້ອດໆຢູ່ໃນກະຕ່າທີ່ປິດແຈບເຫລົ່ານັ້ນເຂົ້າໄປສູ່ຫ້ອງທົດລອງ. ນະທີ່ນີ້, ຕາມທີ່ຂ້າພະເຈົ້າຮູ້ແມ່ນ: ສາດສະດາຈານແລະນາງ ລີເຢີ ໄດ້ກອບເອົາພິດງູແລະປຸງແຕ່ງມັນດ້ວຍວິທີໃດວິທີຫນຶ່ງ. ທຸກໆອາທິດຈະມີລົດຂົນສົ່ງຄັນຫນຶ່ງມາຈາກ ຣັງກູນ ແລະບັນທຸກບັນດາຫີບທີ່ບັນຈຸຫລອດຢາຕ່າງໆເຊິ່ງທຳການຫໍ່ຮອງໄວ້ເປັນຢ່າງດີນັ້ນຄືນໄປ. ໃນຫີບເຫລົ່ານັ້ນ ລ້ວນແຕ່ຕິດຊື່ບ່ອນຮັບເຄື່ອງນີ້, ນັ້ນຄືບັນດາບໍລິສັດພະລິດຢາປົວພະຍາດຂອງອາເມລິກາ.

ມີເທື່ອຫນຶ່ງ ຂ້າພະເຈົ້າໄດ້ນຳເອົາງູ ລາເຄຍີເຊີ ຕົງເປັນກະຕ່າເຂົ້າໄປໃນຫ້ອງທົດລອງ. ສາດສະດາຈານງຶກຫົວທັກທາຍຂ້າພະເຈົ້າຢ່າງສະຫນິດສະຫນົມ.

- ບິນ, ພວກເຮົາຫາກໍເວົ້າເຖິງເຈົ້າ. ຂ້ອຍເວົ້າກັບນາງ ລີເຢີ ວ່າເຈົ້າເປັນຄົນສະຫລາດ, ຊອກຮູ້ແລະກ້າຫານ.

ຍິງສາວພວມໃຊ້ແປ້ງເພື່ອກວດກາເບິ່ງປາກງູນ້ອຍໂຕຫນຶ່ງທີ່ນາງພວມກຳຮັດໄວ້ແຫນ້ນໆດ້ວຍມືຊ້າຍຂອງນາງ.

- ບິນ, ເຈົ້າຕ້ອງການຢາກຊອກຮູ້ພວກອິບພະຍິບ ທີ່ພວມອາໃສຢູ່ໃນສວນນີ້ໃຫ້ເລິກເຊິ່ງຕື່ມແດ່ຈັກຫນ່ອຍບໍ່? - ນາງຖາມ.

- ດ້ວຍຄວາມຍິນດີ! - ຂ້າພະເຈົ້າຕອບດ້ວຍຄວາມຮ້ອນໃຈ.

- ບິນ, ນາງຈະເປັນຜູ້ອະທິບາຍບາງບົດຮຽນໃຫ້ແກ່ເຈົ້າ, - ສາດສະດາຈານເວົ້າ. - ບາງ

ທີໃນໂຮງຮຽນຊີວະວິທະຍາຢູ່ໂຮງຮຽນມັດທະຍົມນັ້ນ, ເຂົາເຈົ້າອາດຈະເວົ້າເຖິງແຕ່ພຽງແມງ ໄມ້ປີກແຂງແລະພວກແມງກະເບື້ອເທົ່ານັ້ນແມ່ນບໍ່? - ລາວເພີ່ຍຍິ້ມອອກມາ.

- ຂ້າພະເຈົ້າສຳເລັດການສຶກສາຊັ້ນເອກຢູ່ ດີຍັງ, - ຂ້າພະເຈົ້າເວົ້າດ້ວຍຄວາມເອກອ້າງ.

- ດີ, - ສາດສະດາຈານສັນລະເສີນ, - ເຖິງແມ່ນຈະຢູ່ແຫ່ງນັ້ນໄປອີກ ຂ້ອຍກໍຄິດວ່າເຈົ້າ ຈະໄດ້ຍິນເລື່ອງກ່ຽວກັບພວກງູນີ້ຫນ້ອຍທີ່ສຸດ.

ເຊົ້າຂອງມື້ລຸນມາ, ນາງລີເຢີ ໄປທີ່ສວນແລະຖາມຂ້າພະເຈົ້າວ່າ:

- ບີນ, ໃນຄອກຕ່າງໆຮຽບຮ້ອຍແລ້ວບໍ່?

- ຮຽບຮ້ອຍແລ້ວ, ຍານາງ, ສະບາຍດີ ຍານາງ.

- ມື້ນີ້ພວກເຮົາຈະຮຽນບົດທຳອິດ, - ຍິງສາວເວົ້າດ້ວຍນ້ຳສຽງເຄັ່ງຄັດ, - ພວກເຮົາຈົ່ງ ພ້ອມກັນໄປທີ່ສວນຕອນໃຕ້.

ພວກຂ້າພະເຈົ້າເດີນໄປຕາມເສັ້ນທາງກ້ວາງປູດ້ວຍຂີ້ຊາຍ ຊຶ່ງແສງແດດໄດ້ສ່ອງເຈືອຈານ ລົງມານັ້ນ. ບັນດາໃບອັນແຂງຂຶດຂອງຕົ້ນກະບອງເພັດນອນແບໃບຢູ່ເທິງໂງ່ນຫີນອັນຮ້ອນຈັດ ທີ່ປົກຄຸມໄປດ້ວຍໄຄຫີນໂຄກສີບົວແລະສີຂຽວ. ນາງ ລີເຢີ ຢຸດຢູ່ຂ້າງໂງ່ນຫີນໂງ່ນຫນຶ່ງທີ່ຫຸ້ມ ຄຸມໄປດ້ວຍເຄືອເຂົາຊະນິດໃບບາງຢັ່ງສານກັນຢູ່ນັ້ນ.

- ພວກເຮົາຈະຕ້ອງບັດເຊ່ຍ ງູມູຊຮານຕົວທີ່ໃຫຍ່ແລ້ວນັ້ນອອກໄປຈາກສວນນີ້ໃຫ້ຫມົດ. ພວກມັນອອກແມ່ແພ່ລູກຫລາຍໂພດ ເຖິງຂັ້ນວ່າບໍ່ດົນເທົ່າໃດພວກມັນກໍຈະກິນງູລາເຄຍີເຊີ ຂອງພວກເຮົາໄປຫມົດກັງງ. ຂ້ອຍຈະສອນວິທີຈັບງູຊະນິດນີ້ໃຫ້ເຈົ້າ. ມັນບໍ່ມີພິດດອກແຕ່ ກໍສາມາດຕອດຄົນໄດ້. ທາດຕ່າງໆທີ່ລະບາຍອອກມາດ້ວຍຕ່ອມນ້ອຍໆຂອງພວກມັນອາດສາ ມາດໃຊ້ເປັນເຊື້ອສຳລັບລະລາຍທາດພິດຊະນິດອື່ນໆໄດ້.

ລີເຢີ ສວມຊິບມືກັນງູເຂົ້າໄປດ້ວຍຄວາມຊຳນິຊຳນານ ແລະຄ່ຽນຍ້າຍກ້ອນຫີນອອກໄປ ທາງຂ້າງຢ່າງວ່ອງໄວ. ພວກງູທີ່ລີ້ຊ່ອນບ່ອນຕົວຢູ່ເບື້ອງລຸ່ມສົ່ງສຽງດັງອຶດໆອອດໆຂຶ້ນໂລດ.

ເປັນເວລາຊົ່ວໂມງເຄິ່ງ ພວກຂ້າພະເຈົ້າຈຶ່ງສາມາດລ່າງູຢູ່ໃນສວນອຸທິຍານໄດ້. ພວກຂ້າ ພະເຈົ້າໄດ້ທຳການຈັບງູ ມູຊຮານ ທ້ອງຂາວໂອກໂປກ, ຕົນໂຕສີນ້ຳຕານເຫລົ່ານັ້ນ ເຂົ້າໃສ່ ຄອກທີ່ເຮັດດ້ວຍໄມ້ອໍ້, ຫລັງຈາກນັ້ນ ຂ້າພະເຈົ້າ ກໍມອບໃຫ້ອີລຸງຫລີ ເອົາໄປຈັດການ.

- ບິນ, ຈົ່ງຈື່ຊື່ງູແຕ່ລະຊະນິດ, - ນາງ ລີເຢີເວົ້າ. - ຈົ່ງສັງເກດເບິ່ງຄວາມຊິນເຄີຍຕ່າງໆຂອງພວກມັນ. ຫນ້າເສຍດາຍແຕ່ວ່າຢູ່ໂຮງຮຽນ ເຂົາເຈົ້າບໍ່ສອນວິທະຍາສາດກ່ຽວກັບງູຊະນິດຕ່າງໆໃຫ້...

ແມ່ນແລ້ວ, ສາດສະດາຈານ ໃຫ້ຄຳສັງເກດການຖືກຕ້ອງທີ່ສຸດຄື ໃນໂຮງຮຽນຕ່າງໆເຂົາເຈົ້າພຽງແຕ່ເວົ້າໃຫ້ພວກເຮົາຟັງເຖິງແມງກະເບື້ອແລະແມງໄມ້ປີກແຂງ ຊະນິດຕ່າງໆເທົ່ານັ້ນ. ຂ້າພະເຈົ້າຍັງຈື່ຈຳບາງສິ່ງບາງຢ່າງກ່ຽວກັບແມງໄມ້ຊະນິດຫນຶ່ງທີ່ມີອາຊີບລ່າບົ້ງຂາງຄືບ, ແລະກ່ຽວກັບແມງໄມ້ປະເພດທີ່ເປັນເຄືອຍາດກ່ຽວກັບແມງຄຳຫາດ, ແມງດາ ທີ່ຫາລ້ຽງຊີບດ້ວຍຫນອນນ້ຳ. ຂ້າພະເຈົ້າຮູ້ວ່າແມງໄມ້ປະເພດປີກແຂງເຊັ່ນ ຈູ່ຈີ່ ມີອາຊີບລ່າພວກຫນອນແມງວັນ. ສ່ວນແມງໄມ້ທີ່ເປັນສາຍຍາດຂອງ ແອລາແຕຣີຍ໌ ນັ້ນ, ຈຸດພິເສດຂອງມັນແມ່ນ ຖ້າປີ້ນມັນຫງາຍທ້ອງຂຶ້ນ, ມັນກໍຈະປີ້ນຄືນໄດ້ຢ່າງຄ່ອງແຄ້ວ ແລ້ວຢືນຫມັ້ນຢູ່ດ້ວຍຂາທັງຫົກຂອງມັນ. ຂ້າພະເຈົ້າຍັງໄດ້ຍິນເພິ່ນເວົ້າເຖິງແມງໄມ້ບາງຊະນິດທີ່ສາມາດທຳລາຍໄມ້ທ່ອນແລະແມງໄມ້ປະເພດບົ້ງກື, ເມື່ອພົບກັບອັນຕະລາຍມັນຈະມ້ວນຕົວເຂົ້າຈົນມົນອ້ອມລ້ອມຄືກັບລູກຄຳພາຍດິນກ້ອນຫນຶ່ງ.

ແຕ່ເມື່ອເວົ້າເຖິງງູແລ້ວ... ຍິ່ງຟັງຄຳບັນຍາຍຂອງນາງ ລີເຢີເທົ່າໃດ ຂ້າພະເຈົ້າກໍຍິ່ງມີຄວາມເຫລື້ອມໃສຕໍ່ບັນດາກິດຈະການຄົ້ນຄວ້າກ່ຽວກັບງູຊະນິດຕ່າງໆ. ນາງ ລີເຢີເປັນຄູສອນທີ່ມີມານະຈິດ, ແລະອົດທົນຜູ້ຫນຶ່ງ; ແລະກໍ ນັບວ່າອີກຄັ້ງຫນຶ່ງຂ້າພະເຈົ້າຮູ້ສຶກວ່າຕົນຄືກັບນັກຮຽນຢູ່ ແອຊູໂອເຣີ ແຕ່ຄາວກ່ອນ.

ພຸ້ນ, ງູນ້ອຍສີເຫລືອງຕົວຫນຶ່ງພວມນອນຂົດໂຄ້ງຢູ່ເທິງຂີ້ຊາຍ. ນາງ ລີເຢີ ຄ່ອຍໆໃຊ້ດົ້ວແກ້ວບໍລິສຸດເຕັກເອົາມັນໄວ້, ສັດຕົວນັ້ນອ້າປາກຂຶ້ນ. ຢູ່ລະຫວ່າງກາງເພັນແຂ້ວທັງສອງເບື້ອງຂອງມັນແມ່ນລີ້ນແງ່ພວມແຫຍ່ແລັບໆອອກມາ ແລະສັ່ນຄືກັບໃຍແມງມຸມທີ່ພວມສະເທືອນຕໍ່ສາຍລົມ. ດວງຕາຫງໍ່າເງືອດຂອງມັນບັນຈຸເອົາໄວ້ເຊິ່ງຄວາມຮ້າຍກາດອັນເລິກລັບ. ນາງລີເຢີ ເວົ້າ:

- ບິນ, ພວກເຮົາຈົ່ງທວນຄືນເຖິງບັນດາວິຊາວະການຕົ້ນຕໍ. ຊື່ລວມໆທາງວິທະຍາສາດກ່ຽວກັບງູແມ່ນຫຍັງ?

- ໂອພີເດຍ.

- ແມ່ນແລ້ວພວກມັນຄື...

- ສັດເລືອຄານຊະນິດຫນຶ່ງ.

- ຖືກແລ້ວ, ເປັນປະເພດສັດທີ່ມີກະດູກສັນຫລັງ ຈຸດພິເສດອັນຫນຶ່ງຂອງງູແມ່ນບໍ່ມີຕີນ. ເຂົາເຈົ້າແບ່ງມັນອອກເປັນສອງສາມຈຳພວກ: ຈຳພວກງູເຫລື້ອມ, ຈຳພວກງູມີພິດ, ຈຳພວກງູບໍ່ມີພິດ. ງູທີ່ຢູ່ຕໍ່ຫນ້າພວກເຮົາແມ່ນງູຫຍັງລະ? ຈັ່ງໃດ, ບິນ...

ຂ້າພະເຈົ້າຕອບດ້ວຍຄວາມອາຍ, ທັງເກືອບກະຄືນັກຮຽນຫ້ອງ ປ. ຫນຶ່ງ.

- ນີ້ແມ່ນງູລອກຄາບທີ່ຈັດເຂົ້າຢູ່ໃນຈຳພວກງູທີ່ບໍ່ມີພິດ. ຄາງກະໄດຂອງມັນຢູ່ຄືງທີ່ແລະເປັນຍວງອອກມາທາງຫນ້າ. ກ່ຽວກັບຮູບຮ່າງແລະທີ່ຕັ້ງຂອງແຂ້ວແລ້ວ, ງູຊະນິດນີ້ຄືກັນກັບຈຳພວກທີ່ມີທໍ່ລະບາຍພິດຢູ່ເລິກ.

- ດີຫລາຍ, - ນາງ ລີເຢີ ໃຫ້ກຳລັງໃຈ. ນາງພະຍາຍາມຈັບເອົາງູຕົວນັ້ນແລ້ວໃຊ້ໄມ້ດັ້ງງັດປາກມັນອ້າອອກ. - ເບິ່ງນີ້ນີ້, ບິນ. ເຂົາເຈົ້າສາມາດເອີ້ນງູປະເພດນີ້ວ່າເປັນງູມີພິດແຕ່ບໍ່ອັນຕະລາຍໄດ້. ເຈົ້າເຫັນທໍ່ລະບາຍພິດຢູ່ປາກເບື້ອງເທິງຂອງມັນບໍ່? ທາດທີ່ຕິດຢູ່ກັບທໍ່ນັ້ນລະບາຍອອກມາເປັນພິດແທ້, ແຕ່ແຂ້ວຂອງງູຊະນິດນີ້ ກໍເຊັ່ນດຽວກັນກັບຈຳພວກທີ່ຕັ້ງຢູ່ເລິກໂພດ ແລະໃນຕົວຈິງແລ້ວ ພວກມັນບໍ່ສາມາດຂົບໄດ້, ນອກຈາກວ່າ ພວກເຮົາປ່ອນມືນິ້ວກ້ອຍເຂົ້າໄປໃນປາກຂອງມັນເທົ່ານັ້ນມັນຈຶ່ງຂົບໄດ້.

ຂ້າພະເຈົ້າໃຫ້ສິດຕົນເອງໃນການຕອບຄຳເວົ້າຂອງນາງ:

- ແຕ່ກໍບໍ່ແນ່ວ່າຜູ້ໃດກໍຈະຕ້ອງການຈະເຮັດແບບນັ້ນ...

ພາຍຫລັງທີ່ຮ່ຳຮຽນມາເປັນເວລາເກືອບເດືອນເຄິ່ງ, ນາງລີເຢີໄດ້ເວົ້ານຳຂ້າພະເຈົ້າຢ່າງອ່ອນຫວານວ່າ:

- ເຈົ້າກ້າວຫນ້າຂຶ້ນຫລາຍແລ້ວ. ຂ້ອຍມີຄວາມພູມໃຈທີ່ສຸດທີ່ຈະໄດ້ບອກຂ່າວນີ້ໃຫ້ສາດສະດາຈານຮູ້.



8–952

ຢູ່ທີ່ ອຸທິຍານຂອງ "ສາດສະດາຈານງູ" ນັ້ນ ຂ້າພະເຈົ້າຮູ້ວ່າ ການສັງເກດເບິ່ງສັດເດຍລະສານເປັນສິ່ງສຳຄັນຍິ່ງ. ງູ...ຕາມຄຳເວົ້າຂອງນາງ ລິເຢີ ແລ້ວ, ມັນມີເຖິງພັນຫ້າຮ້ອຍຊະນິດ. ມັນເປັນສັດປະເພດຫນຶ່ງໃນຈຳພວກຈີ່ໂກະ, ຜ່ານໄລຍະເວລາອັນດົນນານມາເປັນລ້ານໆປີນັ້ນ, ພວກມັນມີຄວາມຊິນເຄີຍກັບການເລືອໄປດ້ວຍທ້ອງ, ແລະຊິນເຄີຍກັບການກືນລືນເຫຍື່ອອາຫານກ້ອນໃຫຍ່ຢ່າງບໍ່ຕ້ອງຫຍ້ຳອີກດ້ວຍ. ຍ້ອນບໍ່ມີປະໂຫຍດໃນການເລືອຄານ ດັ່ງນັ້ນຕີນທີ່ມັນເຄີຍມີກໍຄ່ອຍໆກຸດຫ້ຽນໄປຈົນຫມົດ. ສ່ວນຄວາມສາມາດກືນສັດໃຫຍ່ເປັນອາຫານຂອງພວກມັນນັ້ນ ໄດ້ຊຸກຍູ້ໃຫ້ຮ່າງກາຍຂອງມັນມີການວິວັດທະນາການບາງຢ່າງ, ບໍ່ພຽງແຕ່ຄາງກະໄດເບື້ອງລຸ່ມ, ແຕ່ກະດູກຫົວພາກລຸ່ມຂອງມັນ ກໍລ້ວນແຕ່ສາມາດເຄື່ອນຕີງໄດ້ເປັນຢ່າງດີ. ຍ້ອນແນວນັ້ນ ພວກມັນຈຶ່ງສາມາດອ້າປາກຂຶ້ນໄດ້ຈົນພວກເຮົາຄຶດວ່າປາກຂອງມັນກວ້າງໂພດ ຖ້າຫຽບໃສ່ຫົວຂອງມັນ.

ສິ່ງທີ່ຫນ້າແປກໃຈທີ່ສຸດນັ້ນຄື ຮີມຕາຂອງງູເຄື່ອນຕີງບໍ່ໄດ້. ມັນໃສງຕິດຈອດກັນແລະບັງຫນ່ວຍຕາຂອງງູໄວ້ຄືກັບແກ້ວປົກຢູ່ເທິງຫນ້າໂມງ. ບາງທີອາດແມ່ນບັນຫານີ້ເອງທີ່ເຮັດໃຫ້ການແນມເບິ່ງຂອງງູມີວາດຊົງເປັນຕາອະເຫຍືອງກໍເປັນໄດ້?

ຂ້າພະເຈົ້າຊິນເຄີຍກັບງູຊະນິດຕ່າງໆ ເຖິງຂັ້ນວ່າ ຖ້າຫາກຜັນເຫັນງູເຫລືອມຕັ້ງເປັນຝູງ, ຂ້າພະເຈົ້າກໍບໍ່ໄດ້ຫວາດຫວັ່ນໃນການເຜັ່ນຜະຫຍອງເຂົ້າຕໍ່ສູ້ກັບມັນ. ຂ້າພະເຈົ້າມີຄວາມຮອບຮູ້ຢ່າງເຖິງຖອງກ່ຽວກັບນິດໃສອັນໂຫດຮ້າຍຂອງງູເຫລືອມອໍ້ ເຊິ່ງເຄີຍຈອບເອົາຄົນຢູ່ເທິງທະເລຊາຍ. ຂ້າພະເຈົ້າຍັງຮູ້ຈັກຄວາມຊິນເຄີຍຂອງພວກງູຄວ່າງຄ້ອນ, ພວກມັນເຄີຍເລືອຂຶ້ນໄປຢູ່ເທິງງ່າໄມ້ຕ່າງໆ ແລ້ວພຸ່ງຕົວຈາກບ່ອນນັ້ນຄືລູກທະນູລົງມາໃສ່ສັດທີ່ຕົກເປັນເຫຍື່ອ. ຂ້າພະເຈົ້າຮຽນສັງເກດງູພິດປະເພດຈົງອາງ, ສາງຮ່າທີ່ມີສີສັນລວດລາຍແລະງູເຫົ່າຫ້ອມສີດຳ, ຫມາຍຄວາມວ່າຂ້າພະເຈົ້າໄດ້ຮຽນສັງເກດການ ກ່ຽວກັບພວກສັດຕູທີ່ອັນຕະລາຍຮ້າຍກາດທີ່ສຸດຂອງມະນຸດ. ບໍ່ມີງູເຫົ່າຕົວໃດໆທີ່ຈະລອດພົ້ນຈາກຂ້າພະເຈົ້າເຂົ້າໄປສູ່ປ່າຫຍ້າໄດ້, ສ່ວນງູຈົງອາງນັ້ນ ອາດສາມາດຈຳແນກມັນໄດ້ແຕ່ໄລຍະໄກເຖິງສີ່ສິບຟຸດ.

ມີເທື່ອຫນຶ່ງ ອີລຸງພໍ່ຄົວ ໂຫ ຈົ່ມວ່າ ພວກຫນູຫມັ່ນເຂົ້າໄປເຮັດຮ້າຍຢູ່ໃນສາງແລະທຳລາຍເຄື່ອງບໍລິໂພກຂອງລາວ: ສາດສະດາຈານອອກຄຳສັ່ງໃຫ້ຈັບເອົາງູ ອີກຊູສິບໂຕມາແຕ່

ສວນ. ອີ່ລຸງ ຫລີ ກອກພວກມັນອອກຈາກກະຕ່າຢູ່ທີ່ປະຕູເຮືອນຄົວ, ເບິ່ງຕົວໃດກໍຈ່ອຍຜອມຄືເຄືອເຂົາຄົມ ແລະຍາວຕັ້ງແມັດເຄິ່ງ. ພວກມັນສ່ອງໆເບມໆເບິ່ງອ້ອມຂ້າງແລ້ວຄ່ອຍໆຄານເຂົ້າໄປໃນສາງສະສົມເຄື່ອງບໍລິໂພກສຳຮອງຂອງພວກຂ້າພະເຈົ້າ. ພວກມັນຄານຂຶ້ນຂັ້ນໄດໄປຢ່າງຄ່ອງແຄ້ວ, ຈາກນັ້ນຄາວຫນຶ່ງກໍພ້ອມກັນນອນສະບາຍຢູ່ເທິງຮ້ານ ປານວ່າພວກມັນເຄີຍດຳລົງຊີວິດຢູ່ແຫ່ງນີ້ມາແຕ່ດົນແຕ່ນານແລ້ວເອົາໂລດ.

ກາງຄືນ, ຂ້າພະເຈົ້າໄປສາລະເວກັງວຫນຶ່ງຢູ່ໃນສວນ, ພວກພໍ່ຄົວຊາວຈີນເອີ້ນຂ້າພະເຈົ້າເຂົ້າໄປເບິ່ງໃນເຮືອນຄົວ, ຢູ່ຫັ້ນ, ຂ້າພະເຈົ້າໄດ້ຍິນສຽງຜີລົມຜ່າວໆ. ນັ້ນແມ່ນສຽງຮ້ອງຂອງງູ ອິກຊູ, ງູຊະນິດທີ່ຈັບຫນູເກັ່ງເປັນຫນຶ່ງບໍ່ມີສອງ, ທີ່ໄດ້ກິນອີ່ມແປະອີ່ມແປ້ແລ້ວ.

ຕອນເຊົ້າ, ເມື່ອສາດສະດາຈານປີນຂຶ້ນເມືອເທິງຮ້ານສາງນຳຂ້າພະເຈົ້າ, ເພິ່ນເວົ້າວ່າ:

- ບໍ່ມີແນວໂຕໃດທີ່ຈະທຽມທັນກັບງູ ອິກຊູໄດ້ ປີນ, ຈົ່ງສັງເກດເບິ່ງ...

ພວກງູ ອິກຊູ ພວມນອນຢຽດຕົວຢູ່ເທິງຮ້ານ. ແຕ່ມັນບໍ່ແມ່ນພວກງູທີ່ຈ່ອຍຜອມຍັງແຕ່ຫນັງພັນກະດູກຄືເມື່ອກ່ອນນີ້ແລ້ວ, ມັນກາຍມາເປັນງູໃຫຍ່, ຕຸ້ຍ, ທ້ອງພີອ່ອງລ່ອງເຕັມແຕ່ຫນູ, ພວມນອນຢູ່ຢ່າງສະຫວາດສະເຫວີຍ. ເມື່ອ ອິກຊູ ກິນອີ່ມແລ້ວ ກໍບໍ່ສາມາດຈະມີກຳລັງແຮງໃດໆໃນໂລກນີ້ທີ່ຈະສາມາດປຸກມັນໃຫ້ຕື່ນໄດ້. ຕາບໃດ ອິກຊູ ຍັງບໍ່ທັນລະລາຍອາຫານໃນທ້ອງມັນຫມົດແລ້ວ ພວກມັນກໍຄົງນອນຕໍ່ໄປ. ຕ້ອງລໍຖ້າຈົນເຖິງຍາມມັນຕື່ນນອນແລ້ວ ຍາມນັ້ນຈຶ່ງສາມາດນຳເອົາພວກມັນໄປບ່ອນອື່ນທີ່ມີຫນູໄດ້. ບ່ອນໃດທີ່ເຄີຍມີ ອິກຊູ ຢູ່ມາແລ້ວ, ຢ່າງນ້ອຍກໍຕ້ອງ ຫລັງຈາກນັ້ນເຄິ່ງປີ ຫນູຈຶ່ງກ້າບ່ອນຫົວເຂົ້າມາ.

ອີ່ລຸງ ຫລີ ຈັບເອົາງູທີ່ພວມນອນຢູ່ນັ້ນເຂົ້າໃນກະເປົາ, ສ່ວນພໍ່ຄົວ ໂຫ ນັ້ນກໍໄດ້ເລົ່າເລື່ອງເມື່ອກ່ອນນີ້ລາວໄດ້ເປັນຄົນຊ່ວຍວຽກໃຫ້ນັກບວດຝະລັ່ງອົງຫນຶ່ງຢູ່ ກຳປູເຈຍ ແລະພວກຫນູຫມື່ນໄດ້ຈັດຕັ້ງກັນບຸກໂຈມຕີເຂົ້າໃນກຸຕິຂອງພະອົງນັ້ນຄືແນວໃດ ສູ່ສາດສະດາຈານຟັງ. ພວກຫນູກິນອາຫານສຳຮອງທຸກຢ່າງໃນກຸຕິຈົນກ້ຽງ, ນັບທັງຕູ້ສະຫມຸດ, ເກີບ ແລະກັດຂາດຽງທັງສີ່ຈົນມຸ່ນຫມົດ, ສ່ວນນັກບວດຕ້ອງຜູກເປນອນແຂວນຢູ່ຕັ້ງເປັນອາທິດ, ຕ້ອງອົດກິນ, ອົດດື່ມແລະຕ້ອງສັງເກດເບິ່ງວ່າພວກຫນູຫມື່ນພິພາກນັ້ນພວມຊອກຄົ້ນຫມົ້ນເຈາະຫຍັງແດ່ຢູ່ໃນກຸຕິຂອງຕົນ.

ສາດສະດາຈານ ເວົ້າ:

- ເປັນຈັ່ງຊັ້ນແລ້ວ, ກ້າບໍ່ມີ ອຸກຊູ, ຢ່າງນ້ອຍກໍມີແມວຈັກໂຕຢູ່ໃນກໍາມື.

ຂໍ້ສັງເກດຕ່າງໆຂອງນາງ ລີເຢີ ກ່ຽວກັບຄວາມກ້າວຫນ້າຂອງຂ້າພະເຈົ້ານັ້ນໄດ້ພາໃຫ້ສາດສະດາຈານເວົ້າກັບຂ້າພະເຈົ້າ:

- ຕ້ອງຊອກຫາຄົນຜູ້ອື່ນມາເວນຍາມປ່ຽນເຈົ້າ, ສ່ວນເຈົ້ານັ້ນ, ເຮົາຈະສອນໃຫ້ຄ່ອຍໆມີຄວາມຊິນເຄີຍກັບວຽກງານຢູ່ໃນຫ້ອງທົດລອງ.

ຂ້າພະເຈົ້າສວມເສື້ອຄຸມຂາວຂອງຫ້ອງທົດລອງເຂົ້າໃສ່ຕົວ, ແຕ່ໃນໃຈຮູ້ສຶກວ່າມີຄວາມຢໍາແຢງແລະວິຕົກວິກວົນຢູ່.

- ບິນເອີຍ, ແນ່ນອນວ່າເຈົ້າຈະກາຍເປັນພະນັກງານທົດລອງຄົນຫນຶ່ງທີ່ຊໍານິຊໍານານ, - ສາດສະດາຈານເວົ້າ, - ພຽງແຕ່ເຈົ້າປະຕິບັດຕາມຫລັກການທີ່ພິເສດທີ່ສຸດຢ່າງຫນຶ່ງຄື: "ກ່ອນອື່ນຫມົດຈະຕ້ອງສະອາດແລະມີຄວາມຮອບຄອບກ້ວນກີ່". ຂ້ອຍຈະສອນໃຫ້ເຈົ້າ. ບາງທີ ມັນອາດຈະບໍ່ຕໍ່າແຕ້ມໄປກ່ວາໂຄງການອັນດັບສອງຂອງວິທະຍາໄລ ດີຍັງ...

ທ່ານ ມິນໂຮຍເຊີ ກໍຄືກັບທຸກໆຄົນໃນທີ່ແຫ່ງນັ້ນ ລ້ວນແຕ່ປະພຶດຕົວເປັນຢ່າງດີຕໍ່ຂ້າພະເຈົ້າ. ສາດສະດາຈານໄດ້ສອນໃຫ້ຂ້າພະເຈົ້າຊິນເຄີຍກັບວິທະຍາການທາງດ້ານການທົດລອງຈໍານວນຫນຶ່ງ. ຂ້າພະເຈົ້າຈໍາແນກ ພິດຂອງງູ, ຜົນກະທົບຂອງມັນຕໍ່ຮ່າງກາຍຂອງມະນຸດນັ້ນ, ມີຢູ່ສອງປະເພດຄື: ຊະນິດທີ່ຫນຶ່ງເຮັດໃຫ້ລະບົບເສັ້ນປະສາດເປັນອໍາມະພາດ, ຊະນິດທີ່ສອງ ແມ່ນກໍ່ຄວາມເນົ່າເປື່ອຍໃຫ້ແກ່ຈຸລັນ.

ໃນຫ້ອງທົດລອງນັ້ນ, ພວກຂ້າພະເຈົ້າກວດກາຄວາມແຮງຂອງພິດໃນຮ່າງກາຍຂອງຫນູພຸກ, ນອກຈາກວຽກນີ້ແລ້ວ, ສາດສະດາຈານຍັງຄົ້ນຄວ້າດ້ວຍຕົນເອງຢູ່ໃນຫ້ອງເຮັດວຽກຂອງເພິ່ນ, ແລະຂ້າພະເຈົ້າມີຫນ້າທີ່ຮັບຜິດຊອບໃນການກະກຽມບັນດາຫລອດແກ້ວທົດລອງແລະກະປຸ໋ງແກ້ວທີ່ສະອາດໃຫ້ເພິ່ນ.

ຂ້າພະເຈົ້າຮູ້ຈັກວິທີກະກຽມນໍ້າກັ່ນທີ່ບໍ່ສົບສົນປານໃດນັ້ນແລ້ວ ແລະຮ້ອນໃຈລໍວັນທີ່ເຂົາເຈົ້າຈະຫາຄົນເວນຍາມສວນຜູ້ໃຫມ່ມາປ່ຽນຂ້າພະເຈົ້າ, ສາດສະດາຈານຈະຍົກຍ້າຍຂ້າພະເຈົ້າໄປເຮັດວຽກຢູ່ຫ້ອງທົດລອງ ພຸ້ນເລີຍ.

## III

ທຸກສິ່ງທຸກຢ່າງລ້ວນແຕ່ເປັນມິ່ງຄຸນທັງນັ້ນ. ໃນຂະນະທີ່ທ້ອງຟ້າອັນກ້ວາງໃຫຍ່ແຈ່ມໃສພວມເບີກເບີຍອອກມາຢູ່ເທິງຫົວຂອງຂ້າພະເຈົ້ານັ້ນ ທັນໃດ ໄພພິບັດອັນຫນຶ່ງກໍໂຫມ່ງລົງໃສ່ຂ້າພະເຈົ້າ.

ງູປະເພດຫາຍາກທີ່ສຸດ ຄືງູ ເດີຢີເອີ ຍາວຕັ້ງສອງຟຸດນັ້ນຄ່ອຍໆຫາຍສາບສູນໄປຈາກອຸທິຍານ. ທ່ານ ມິນໂຮຍເຊີ ຊຶ່ງຈຳພວກນັ້ນມາຈາກຊາວທ້ອງຖິ່ນ. ແຕ່ລະຕົວກໍຕ້ອງຈ່າຍໄປປະມານສອງສາມ ປາຍເຊີ ແລ້ວນຳເຂົ້າມາປ່ອຍໄວ້ໃນສວນ. ດັ່ງທີ່ໃຜໆກໍຮູ້ແລ້ວວ່າ, ງູຊະນິດນີ້ອາໄສຢູ່ທີ່ເປີ້ນພູຫິມະໄລຍາພຸ້ນ. ສາດສະດາຈານບໍ່ສາມາດຊອກຫາເວລາຫວ່າງພໍທີ່ຈະອອກໄປໄກແບບນັ້ນດ້ວຍຕົວເພິ່ນເອງໄດ້, ສ່ວນຊາວທ້ອງຖິ່ນນັ້ນ ບໍ່ຈັກວ່າເຂົາເຈົ້າໃຊ້ວິທີການໃດ ຈຶ່ງໄປຈັບງູຢູ່ແຫ່ງນັ້ນແລ້ວກັບມາໄດ້ທຸກໆອາທິດ, ມັນເກີງຂັ້ນວ່າ ກ້າຄິດຄັກໆແລ້ວຈະເຫັນວ່າເລື່ອງນີ້ມັນກາຍເປັນເລື່ອງພິສະດານໄປ. ຍ້ອນແນວນັ້ນສາດສະດາຈານ ມິນໂຮຍເຊີ ຈຶ່ງແພງງູ ເດີຢີເອີ ເປັນຍິ່ງ. ພິດແຫ້ງຂອງງູຊະນິດນີ້ກໍຄືກັບພິດຂອງງູ ລາເຄຍີເຊີ ນັ້ນສາມາດຮັກສາໄວ້ໄດ້ຕັ້ງເປັນຊາວປີຢ່າງບໍ່ມີການສູນເສຍຄຸນທາດແຕ່ຢ່າງໃດ. ມັນສາມາດທຳລາຍຊີວິດຄົນໄດ້ໃນຊ່ວງເວລາແຕ່ຫ້າຫາເຈັດຊົ່ວໂມງ. ບັນດາຢາແກ້ພິດທີ່ສາດສະດາຈານປຸງແຕ່ງອອກມາຈາກພິດຂອງງູປະເພດນີ້ສາມາດກອບກູ້ເອົາຄົນທີ່ໃກ້ຈະຕາຍນັ້ນຄືນມາໄດ້. ດັ່ງນັ້ນ "ສາດສະດາຈານງູ" ຈຶ່ງສັ່ງໃຫ້ບົວລະບັດເບິ່ງແຍງງູຊະນິດນີ້ເປັນຢ່າງດີ. ແຕ່ປານນັ້ນ ງູເດີຢີເອີ ກໍຍັງເລີ່ມມີການຫາຍສາບສູນໄປຢ່າງເລິກລັບ, ປານກັບວ່າ ພວກມັນມຸດດິນຫນີໄປເອົາໂລດ. ຂ້າພະເຈົ້າດຳເນີນການກວດກາເບິ່ງກ້ຳຫັງພົງເງີບຕ່າງໆທີ່ຂ້າພະເຈົ້າຮູ້ຈັກຢູ່ໃນອຸທິຍານນີ້. ບາງທີພວກງູ ເດີຢີເອີ ອາດຄວັດຫມ້ອງຢູ່ໃຕ້ດິນກໍບໍ່ຈັກ? ແຕ່ເລື່ອງນັ້ນ, ນາງລີເຢີ ໄດ້ຢືນຢັນວ່າມັນບໍ່ສາມາດເຮັດໄດ້. ຂ້າພະເຈົ້າດຳເນີນການກວດກາລະບົບຮົ້ວທັງຫມົດຢ່າງລະອຽດລະອໍຄືນອີກເທື່ອຫນຶ່ງ. ຂ້າພະເຈົ້າເອົາຂີ້ຊາຍໃຫມ່ໆມາປູໃສ່ຕາມສາຍທາງຕ່າງໆ, ຄິດວ່າຮຸ່ງເຊົ້າມາຈະເຫັນຮອຍສະເລີຍເສີກຂອງພວກຂ້າພະເຈົ້າເລືອໄປແຕ່ບໍ່ເຫັນຫຍັງເລີຍ. ຂ້າພະເຈົ້າໄດ້ລາຍງານເລື່ອງທັງຫມົດເຫລົ່ານີ້ໃຫ້ສາດສະດາຈານຮັບຮູ້. ຂ້າພະເຈົ້າແປກໃຈທີ່ສຸດເມື່ອເຫັນສາດສະດາຈານໂມໂຫປຶງປັງຂຶ້ນ. ເພິ່ນຮ້າຍດ່າຂ້າພະເຈົ້າປານກັບວ່າຂ້າພະເຈົ້ານີ້

ແຫລະ ທີ່ເປັນຜູ້ໄປລັກຈັບເອົາງູຂອງເພິ່ນມາຈືນກິນກັບເຂົ້າແລງຫລືເອືອບເກືອສະສົມໄວ້ຄື ກັບພວກແມ່ຄົວຢູ່ແອຊູໂອເອີເຄີຍເອືອບປາ ເປຕອໍມີຊໍໄວ້ກິນເອົາໂລດ.

ອຸກເອົ້າແລະເບື່ອຫນ່າຍຫລາຍ, ຂ້າພະເຈົ້າໄປຂໍຄວາມເຫັນຈາກນາງ ລີເຢີ. ນາງບອກ ໃຫ້ຂ້າພະເຈົ້າຕິດຕາມເບິ່ງພວກຊາວຈີນ, ແຕ່ສຳລັບຂ້າພະເຈົ້າແລ້ວ, ເຂົາເຫລົ່ານັ້ນບໍ່ເປັນ ທີ່ລະແວງສົງໄສຫຍັງຫມົດ.

ຄົນລັກ! ສຳລັບຂ້າພະເຈົ້າແລ້ວ ບັນຫານີ້ມັນເປັນທີ່ຈະແຈ້ງ ນັບແຕ່ມື້ທີ່ງູ ເດີຍີເອີ ໂຕ ໃຫຍ່ທີ່ສຸດຈຳນວນສິບສອງໂຕສູນຫາຍໄປຈາກອຸທິຍານໃນຄືນເດືອນມືດ ທີ່ອົບອຸ່ນນັ້ນພຸ້ນ. ຕອນເຊົ້າມື້ຕໍ່ມາ, ເມື່ອດວງຕາເວັນເລີ່ມສາຍແສງແດດລົງມານັ້ນ ຂ້າພະເຈົ້າກໍສັງເກດເຫັນ ຮອຍຕີນຂອງຄົນຍ່າງຕີນເປົ່າພິມພາບຢູ່ເທິງຂີ້ຊາຍທີ່ຫາກໍປູຢູ່ທາງເສັ້ນຫນຶ່ງທີ່ຢູ່ເບື້ອງສົ້ນສຸດ ຂອງອຸທິຍານນັ້ນ.

"ເອີ້, -ຂ້າພະເຈົ້າຄຶດ. -ໄດ້, ເຮົາຈະບໍ່ຟ້າວລາຍງານເລື່ອງນີ້ໃຫ້ສາດສະດາຈານຮູ້ໃນ ລະຫວ່າງທີ່ເພິ່ນຍັງໂມໂຫຢູ່ແລະກໍຈະບໍ່ທັນບອກໃຫ້ຄົນຊ່ວຍວຽກຂອງເພິ່ນຮູ້ນຳເທື່ອ. ເຮົາ ຈະຈອບຈັບເອົາແລະດຶງຄໍເສື້ອບັກຫມໍຂີ້ລັກນັ້ນ ລາກມາສາກ່ອນ. ບາດນັ້ນ ຈຶ່ງຊິເຮັດໃຫ້ "ສາດສະດາຈານງູ" ຮູ້ແຈ້ງວ່າ ແມ່ນໃຜກັນແທ້ທີ່ຫາກິນດ້ວຍງູພິດຂອງເພິ່ນ.

ອອກຫວິດສວນອຸທິຍານ, ຂ້າພະເຈົ້າກໍລົງມືກວດຢ່າງລະອຽດລະອໍ, ເບິ່ງທຸກສິ່ງທຸກຢ່າງ ໃນກຳແພງບ່ອນເຊິ່ງຂ້າພະເຈົ້າຖືວ່າຄົນຂີ້ລັກຜູ້ໃດຜູ້ຫນຶ່ງອາດປີນຂ້າມເຂົ້າມາໃນສວນນັ້ນ. ຫ່າງ ຈາກບ່ອນຫັ້ນບໍ່ໄກພໍເທົ່າໃດແມ່ນຫົນທາງໄປສູ່ຮ່ອງກູນ. ຈາກເສັ້ນທາງໃຫຍ່ສາຍນີ້ ມີທາງນ້ອຍ ເລີກລັບສາຍຫນຶ່ງຕັດໄປອີກທາງຫນຶ່ງ ແລະມາຈອດຢູ່ຕີນກຳແພງຂອງອຸທິຍານພໍດີ. ເລື່ອງນີ້ ເວົ້າແທ້ແລ້ວ ມັນເປັນເລື່ອງດູດດຶງຄວາມສົນໃຈທີ່ສຸດ.

ພໍຕົກຕອນຄ່ຳ, ເມື່ອທົ່ວທັງສະຖາບັນຕ່າງກໍງຽບຈົມຢູ່ໃນຄວາມຫລັບຝັນແລ້ວ, ຂ້າພະ ເຈົ້າກໍກຽມເອົາຄ້ອນໄມ້ປ່ອງໃຫຍ່ງລຳຫນຶ່ງ, ໃສ່ເກີບໂບກຢາງອ່ອນໆເຊິ່ງຂ້າພະເຈົ້າເຄີຍໃສ່ຕະ ລຸຍອ່າງນ້ຳເພື່ອໄລ່ຈັບງູທີ່ພວມລອຍຢູ່ນັ້ນ. ກວດກາເບິ່ງໂຄມໄຟສາຍ, ຈັບເອົາສະຫນັບມືທີ່ ຢືມມາຈາກລຸງໂຫນັ້ນຍັດລົງໃສ່ກົງສົ້ງ; ແລະພາຍຫລັງທີ່ອັດປະຕູໂຂງແລະປະຕູສວນຮຽບ ຮ້ອຍແລ້ວ, ຂ້າພະເຈົ້າກໍຕັດສິນໃຈເຮັດໃຫ້ບັນຫາເລິກລັບດັ່ງກ່າວກະຈ່າງແຈ້ງຂຶ້ນ.

ຂ້າພະເຈົ້າຈັບຕາຈ້ອງສ່ອງຕາດູຢູ່ຕະຫລອດຄືນ. ຍ່າງເລາະໄປເລາະມາຕາມຕີນກຳແພງສວນຢ່າງລະມັດລະວັງແລະຄ່ອຍເບົາ ເກືອງຂັ້ນວ່າກະທັ້ງພວກງູ ບູມສະລາງ ແຫ່ງອາຟະລິກາເຊິ່ງເປັນງູຈຳພວກສະຫລາດວ່ອງໄວທີ່ສຸດໃນໂລກ ກໍຕ້ອງອິດສາ. ແຕ່ບໍ່ມີເລື່ອງຫຍັງເກີດຂຶ້ນເລີຍ. ຮຸ່ງມາຂ້າພະເຈົ້າກໍນັບເບິ່ງງູ ເດີຍເອີ. ຍັງຄົບກ້ອນບໍລິບູນຢູ່. ເປັນອັນວ່າຂ້າພະເຈົ້າທຳການເວນຍາມຢູ່ໃນສວນນັ້ນເປັນເວລາສີ່ຄືນລຽນຕິດ, ຊຶ່ງຍາມໃດ ຂ້າພະເຈົ້າກໍໄດ້ສຳນຶກເຫັນຮູບພາບທີ່ຕີນຈະພາດໄມ້ຄ້ອນລົງໃສ່ຫລັງຂອງຄົນຂີ້ລັກນັ້ນຄືແນວໃດ, ແຕ່ມັນກໍຍັງບໍ່ທັນປະກົດຕົວຂຶ້ນມາເທື່ອ.

ຮອດຄືນທີ່ຫ້າ, ຂ້າພະເຈົ້າໄດ້ຍິນສຽງດັງສວາດໆຄ່ອຍໆ, ສຽງນັ້ນບໍ່ຄືກັບສຽງຄານຊວາດໆຂອງງູ ແອັນນິກສະໂຕດ້ອນ ຮາລິສ ແລະກໍບໍ່ເຫມືອນກັບສຽງຟູ່ລົມຂອງງູຈົງອາງຈັກຫນ່ອຍເລີຍ. ງູລ້ວນແຕ່ນອນກັນຫມົດແລ້ວ, ຍາມນີ້ພວກມັນບໍ່ທ່ອນຊິຫມົ້ນເຂົ້າໄປໃນພຸ່ມໄມ້ອີກແລ້ວ.

ຕີນໃສ່ເກີບໂບກຢາງ, ຂ້າພະເຈົ້າຈອບໆ, ຍ່ອງໆໄປຄືແມວ, ຂ້າພະເຈົ້າຫລອຍໄປທາງຕີນກຳແພງດ້ານຕາເວັນອອກ ກໍພໍເຫມາະກັບໂອກາດ. ເງົາຂອງຄົນຜູ້ຫນຶ່ງພາຍກົງໄວ້ເບື້ອງຫລັງພວມປີນຂຶ້ນກຳແພງ, ແຕ່ຂ້າພະເຈົ້າກໍງຸບເອົາຕີນເປົ່າຂອງຄົນຂີ້ລັກໄວ້ໄດ້ກ່ອນແລະດຶງກະຊາກມັນຄືນເຂົ້າມາໃນສວນ.

-ນອນຢູ່ດີໆ, ບັກພິເຜດ, ຢ່າເຫນັງ! -ຂ້າພະເຈົ້າເວົ້າເປັນສຽງຊຸບຊິບ. -ກ່ອນຈະຟາດມຶງຈັກບາດນັ້ນ, ກູຢາກເບິ່ງມຶງວ່າເປັນຫນ້າແບບໃດ.

-ພະຜູ້ເປັນເຈົ້າ, ຍົກໂທດໃຫ້ຂ້ອຍແດ່ເທາະ, -ສຽງທີ່ສັ່ນເຊັນດັງຂຶ້ນມາໃນເງົາມືດ. -ຂ້ອຍສາບານກັບເຈົ້າວ່າໄດ້ສີ່ມື້ມາແລ້ວ ຂ້ອຍບໍ່ໄດ້ກິນຫຍັງເລີຍ...

ຜ່ານຈາກແສງສະຫວ່າງຂອງໄຟສາຍ, ຂ້າພະເຈົ້າແນມເຫັນຄົນຜິວຂາວຊຶ່ງມີສີຫນ້າທີ່ເຕັມໄປດ້ວຍຄວາມອິນລະວົນສິນລະເວງນັ້ນ. ທຳອິດ ຂ້າພະເຈົ້າເອງກໍກະວົນກະວາຍຄືກັນ, ແຕ່ເມື່ອເບິ່ງຫນ້າຄົນຂີ້ລັກນັ້ນລະອຽດລະອໍແລ້ວ, ຂ້າພະເຈົ້າກໍຍິ່ງຮູ້ສຶກໂມໂຫເປັນຟືນເປັນໄຟຂຶ້ນຕື່ມ.

-ຢ່າມາປັ້ນເລື່ອງ, -ຂ້າພະເຈົ້າຮ້ອງແຜດຂຶ້ນຜ່ານຫວ່າງແຂ້ວທີ່ກັດໄວ້ແຫນ້ນໆນັ້ນ.

ເຈົ້າກິນຫຍັງບໍ່ກິນຫຍັງເປັນອາຫິດກໍບໍ່ມີຫຍັງກ່ຽວເຖິງຂ້ອຍ. ເຈົ້າເລັດລອດເຂົ້າມານີ້ດ້ວຍວິທີໃດ, ເພື່ອຫຍັງ?

ຄົນຂີ້ລັກມິດຢູ່, ເຂົາຫັນໃຈຢ່າງຫນັກຫນ່ວງຄືກັບພວມມີຄວາມກິນແຫນງ.

- ເຈົ້າເຮັດຈັ່ງໃດຈຶ່ງຈັບງູ ເດີຍເອີ ໄດ້? ເຈົ້າແມ່ນໃຜ?

- ແມ່ນໃຜຊິເປັນຫຍັງ. - ຄົນຂີ້ລັກຕອບ. - ຈົ່ງປ່ອຍຂ້ອຍໄປສາ. ຂ້ອຍຈະຈົດຈຳບຸນຄຸນຂອງເຈົ້າໄວ້ຕະຫລອດໄປ.

ຂ້າພະເຈົ້າຫົວເຍີ້ຍ.

- ຢ່າຝັນ! ເຈົ້າມາເປັນມານຊີວິດຂ້ອຍອີກແລ້ວ. ຂ້ອຍຈື່ໃບຫນ້າຂີ້ດງດຂອງເຈົ້າໄດ້ດີ.

- ແມ່ນແທ້ຫວະ?

- ແມ່ນ. ຢູ່ ແບັນຣັກບໍ, ເຈົ້າເສຍການພະນັນໃຫ້ຂ້ອຍແລະໂກງເງິນໄປຫນຶ່ງດອນລ່າ, ແຕ່ຂ້ອຍພັດຄືນພົບເຈົ້າຢູ່ຝາສຸດດິນຕໍ່ແຫ່ງນີ້, ມາພວກເຮົາຕ້ອງຄິດບັນຊີກັນໃຫ້ແລ້ວ.

ແມ່ນແລ້ວ, ເຂົາແມ່ນບຸກຄົນຜູ້ທີ່ຫລອກລວງຂ້າພະເຈົ້າດ້ວຍການເສກສັນປັ້ນເລື່ອງກ່ຽວກັບຂຸມພົນກິລາ ແບັລກສະເນັກ. ປະຈຸບັນນີ້ ເຂົາພວມຂາບໄຫວ້ວິງວອນນຳຂ້າພະເຈົ້າ:

- ຢ່າເຕັກຫົວເຂົ່າໃສ່ເອິກຂ້ອຍອີກ. ຂ້ອຍທົນຕໍ່ເຮືອນຮ່າງທີ່ຫນັກດັ່ງຮ້ອຍປອນຂອງເຈົ້າບໍ່ໄດ້.

- ເຈົ້າລັກງູ ເດີຍີຮີ ດ້ວຍວິທີໃດ? - ຂ້າພະເຈົ້າທັງເຕັກເຂົາໄວ້ທັງສໍ້ການ. ເອົາຊິບມືມາໃຫ້ຂ້ອຍເບິ່ງ.

- ສາບານຕໍ່ຟ້າຕໍ່ໄຟໄດ້ວ່າ ຂ້ອຍຈັບງູດ້ວຍມືເປົ່າ...

- ເຈົ້າເວົ້າແບບນັ້ນຊິຟັງໄດ້ຫວະ, - ຂ້າພະເຈົ້າຕອບ ເພາະຮູ້ລົດເດດຂອງງູຊະນິດນີ້ແລ້ວ.

- ຂ້ອຍສັນຍາວ່າຈະເລົ່າໃຫ້ຟັງທຸກຢ່າງ. ຂໍແຕ່ເຈົ້າຢ່າເຕັກຂ້ອຍໄວ້, - ເຂົາເວົ້າແບັບໆຢູ່.

- ເອົາອາວຸດມານີ້, - ຂ້າພະເຈົ້າອອກຄຳສັ່ງ.

- ນີ້, ອາວຸດຂອງຂ້ອຍ.

ຜ່ານຈາກແສງສະຫວ່າງຂອງໄຟສາຍນັ້ນ, ຂ້າພະເຈົ້າເຫັນນີ້ວມືເປົ່າສິບນີ້ວຂອງຄົນຂີ້ລັກນັ້ນ. ມາເຖິງຕອນນີ້ ຂ້າພະເຈົ້າຈຶ່ງມີການອະນຸໂລມໃຫ້ເຂົາ:

- ຢືນຂຶ້ນສາ, ບອກມາດງວນີ້, ແຕ່ຫ້າມຫລິ້ນລວດລາຍ, ບໍ່ສັ້ນຂ້ອຍຍິງ.

ຫມໍຂີ້ລັກກ່າວຂໍໂທດຢູ່ພຸມໆ.

ເລື່ອງທີ່ເຂົາເລົ່ານັ້ນເປັນຫນ້າຈັບໃຈທີ່ສຸດ, ຍ້ອນແນວນັ້ນຂ້າພະເຈົ້າຈຶ່ງບໍ່ທັນຢາກສັນຍານໃຫ້ທຸກຄົນຮູ້ຈັກນຳເທື່ອ. ຂ້າພະເຈົ້າຄຶດຢາກຈະຊອກຮູ້ຄົນໃຈແຂງຜູ້ທີ່ກ້າມາລັກເອົາງູພິດແລະສ່ອງໄພ ຍ່າງຕີນເປົ່າເຂົ້າມາໃນອຸທິຍານຂອງພວກຂ້າພະເຈົ້າໃນຄ່ຳຄືນເດິກດື່ນເຊັ່ນນີ້.

ເຂົາທັງຫັນໃຈຫອບແຫບ, ທັງນັ່ງລົງທີ່ໂງ່ນຫີນ. ກົງບັນຈຸງູ ເດີຍເຣີດັ້ງງງບຢູ່ໃກ້ໆຕີນຂອງພວກຂ້າພະເຈົ້າ. ເຖິງຈັ່ງໃດຂ້າພະເຈົ້າກໍບໍ່ຍອມວາງໄມ້ຄ້ອນໄປຈາກມື.

- ຂ້ອຍບໍ່ຊ່າງຊິເລົ່າ, - ເຂົາເວົ້າຊຸບຊິມທັງລະມັດລະວັງແລະສັ່ນເຊັນ, ຄ້າຍກັບວ່າຢ້ານມີຄົນດັກຟັງຄຳເວົ້າຂອງເຂົາ. - ຂ້ອຍຊື່ວ່າ ວານດິກ, ປະຈຸບັນນີ້ ບໍ່ມີວຽກເຮັດງານທຳ ແລະຂ້ອຍກໍເລີຍລັກເລັກຂະໂມຍນ້ອຍຍ້ອນຄວາມອຶດຫິວ.

- ຄັນຊັ້ນແຕ່ກ່ອນເດ? - ຂ້າພະເຈົ້າຖາມ.

- ກ່ອນນີ້ຫວະ? ຕະຫລອດຊີວິດຂອງຂ້ອຍແມ່ນສ່ຽງຕາຍຊັດເຊພະເນຈອນໄປທົ່ວພິພົບ. ສະເພາະຂ້ອຍແລ້ວ, ເວລາທີ່ມີຄວາມມ່ວນຊື່ນທີ່ສຸດນັ້ນແມ່ນໄລຍະທີ່ດົນດອນຊອນປ່າຕາມຫິນທາງຈາກ ປານາມາໄປສູ່ ຢານຢີບາ ແລະ ອາຟະລິກກາກາງ. ຂ້ອຍເຄີຍໄດ້ລ່າສິງໂຕຢູ່ ອູໂກໂກ ແລະລ່າທະນີຢູ່ເກາະແລບໍ. ໂຊກຊາຕາແກວ່ງຂ້ອຍຈາກ ນິວຢອກເຖິງ ມາເກົ້າແລະກົງກັນຂ້າມ ພາຍຫລັງທີ່ອອກຈາກ ແບັນຮັກບໍ, ຂ້ອຍກໍມາຕັ້ງຫລັກຢູ່ທີ່ ຮັງກູນ, ຂໍເຈົ້າຈົ່ງອະນຸຍາດໃຫ້ຂ້ອຍງົດການເວົ້າເຖິງເຫດຜົນຕ່າງໆ ທີ່ພາໃຫ້ຂ້ອຍຕ້ອງຊັດເຊພະເນຈອນໄປທົ່ວສາລະທິດນັ້ນ. ເຊັ່ນດັ່ງຄຳບູຮານຂອງອິນເດຍເວົ້າໄວ້ວ່າ: "ຕໍ່ຜູ້ມີປັນຍາແລ້ວ, ເວົ້າທາງອ້ອມຄວາມຫນຶ່ງກໍພໍ". ໂອກາດນີ້, ຂ້ອຍຢາກຖາມວ່າໃນກົງຂອງເຈົ້ານັ້ນຍັງມີເຂົາຈີ້ຈັກປ່ຽງຄ້າງຢູ່ແດ່ບໍ່. ຂ້ອຍລືມລິດຊາດຂອງມັນໄປຕັ້ງສີ່ມື້ແລ້ວ... ບໍ່ມີຫວະ? ໄດ້ແລ້ວຊັ້ນ. ຈັ່ງຊັ້ນແລ້ວ, ກ້າຫາກໃນໂລກນີ້ ມີຄົນເຂັ້ມແຂງຜູ້ຫນຶ່ງ ແຕ່ບໍ່ມີວຽກເຮັດງານທຳແລ້ວ, ມັນກໍຍ່ອມຈະສາມາດຄົ້ນຄ້ວາເຝິກແອບໃຫ້ມີຄວາມຊິນເຄີຍຕ່າງໆບໍ່ວ່າແຕ່ກັບພວກງູ, ທະແຫມແຕ່ວ່າວຽກນັ້ນ ສາມາດຊ່ວຍໃຫ້ມັນຊອກຫາອາຫານການກິນສົດໆຮ້ອນໆໄດ້ ໃນແຕ່ລະມື້ລະວັນກໍພໍ. ຄວາມຈິງມັນເປັນຈັ່ງຊັ້ນແລ້ວ. ບັດນີ້ ຂ້ອຍຈ້າງເປັເຄື່ອງໃຫ້ນັກທຳລະນີສາດຂອງຄະນະສຳ

ຫລວດແຫ່ງລາຊະອານາຈັກໄປທີ່ພູເຂົາຫິມະໄລຍາ ແລະກໍຢູ່ທີ່ນັ້ນເອງ ຂ້ອຍສັງເກດເຫັນວ່າ ກາງຄືນ, ພວກງູເດີຢີເຣີ ອັບປີຊຸມນີ້ ລ້ວນແຕ່ຫມົ້ນຫົວເຂົ້າໄປນອນງຽບຢູ່ໃນພຸ່ມໄມ້ຄືກັບສັດ ຄໍາຮູ້ພວກອື່ນໆ. ເວົ້າແທ້ແລ້ວ, ໃນເງົາມືດຂອງຄໍ່າຄືນນັ້ນ, ພວກມັນກໍບອກນອນສອນງ່າຍ ຄືຝູງແກະ, ແລະບໍ່ກັດຄົນເລີຍ. ຄະນະທໍລະນີສາດເດີນທາງຜ່ານ ບອມເບກັບຄືນສູ່ ລາຊະ ອານາຈັກ, ເຂົາເຈົ້າປະໃຫ້ຂ້ອຍຕ້ອງຊຸດເຊພະເນຈອນຢູ່ຕາມຄຸ້ມຂ່ວງຕ່າງໆ. ສໍາລັບຄົນ ຫວ່າງງານແລ້ວ, ຄຸ້ມຂ່ວງຂອງຕົວເມືອງໃດກໍຄືກັນທັງນັ້ນ. ຂ້ອຍຕ້ອງຜ່ານການທົດສອບ ຮ້ອຍແປດພັນຢ່າງ. ຂ້ອຍໄດ້ຮຽນວິຊາຕັດຜົມແລະຝຶກຫັດຕົວຈິງຢູ່ເທິງຫົວຂອງນາຍຈ້າງຈີນ ກະທັ້ງວ່າໄດ້ຫລິງຕັດຫູຂອງເພິ່ນອອກໄປຫນຶ່ງສ່ວນສີ່ໂດຍບໍ່ໄດ້ເຈດຕະນາສາຈຶ່ງແລ້ວ. ແລ້ວ ກໍຈະເຂົ້າໃຈໄດ້ງ່າຍທີ່ສຸດວ່າຫລັງຈາກນັ້ນ ຂ້ອຍກໍໄດ້ໄປນອນຢຽດຢູ່ຂ້າງຂຸມກອກຂີ້ເຫຍື້ອ ນອກຕົວເມືອງຕັ້ງເປັນມື້ແລະຂາກຂີ້ເກືອກຸ້ມນໍ້າລາຍ ຢູ່ຕະຫລອດຍ້ອນແຂ້ວຫັກມຸ່ນຫມົດ. ຂ້ອຍໄປຮັບຈ້າງພໍ່ຄ້ານໍ້າມັນຜູ້ຫນຶ່ງແລະຮຽນເວົ້າພາສາ ອີ່ລານ. ໂຊກຊາຕາໄດ້ເຍາະເຍີ້ຍຂ້ອຍ ຢ່າງຮ້າຍກາດເກີນຄວນ. ແຕ່ຂ້ອຍເລົ່າສິ່ງທັງຫມົດເຫລົ່ານີ້ໃຫ້ເຈົ້າຟັງເຮັດຫຍັງກັນ? ຜູ້ໄດ້ ກິນອີ່ມຈະເຂົ້າໃຈຜູ້ຫິວໄດ້ຈັ່ງໃດ. ພໍ່ຄ້ານໍ້າມັນຈັ່ງໃດຊິຮູ້ຈັກຊີມຊື່ນກັບກິ່ນຫອມແຫ່ງຈັນທະ ຄູ້ແກ່ນຈວງ? ເກີງຈັ່ງໃດຂ້ອຍກໍຂໍຂອບໃຈນໍາເຈົ້າທີ່ບໍ່ທຸບຫົວຂອງຂ້ອຍໃຫ້ແຫລກມຸ່ນໄປຢູ່ ຕີນກໍາແພງຫັ້ນ. ບັດນີ້, ເຈົ້າຈົ່ງປຸກທຸກຄົນຂຶ້ນມາແລະຂັງຂ້ອຍໄວ້ບ່ອນໃດບ່ອນຫນຶ່ງຈົນຮອດ ແຈ້ງ. ບັນຫາມີຢູ່ພຽງວ່າ ກ່ອນອື່ນຫມົດແມ່ນເອົາຫຍັງຈັກຢ່າງໃຫ້ຂ້ອຍກິນສາກ່ອນ, ແລ້ວ ມື້ອື່ນຈຶ່ງນໍາເອົາຂ້ອຍຂຶ້ນສານ. ຈະເຮັດຈັ່ງໃດໄດ້, ເກີງຄາວໂຊກຮ້າຍມັນກໍເປັນຈັ່ງຊີ້ແລ້ວ! ຄົນໂງ່ໄປລ່າເນື້ອ, ແລ້ວມັນເອງກໍຖືກຍິງຕາຍ. ຂ້ອຍເມື່ອຍກັບຊີວິດແບບຫມາງນີ້ຫລາຍ ແລ້ວ. ດີທີ່ສຸດກໍມີແຕ່ຜູກຄໍຕາຍສາ...

ທັນໃດນັ້ນ ຈິດໃຈຂ້າພະເຈົ້າກໍບັງເກີດຄວາມສົງສານເຂົາຂຶ້ນມາ, ຂ້າພະເຈົ້າເວົ້າກັບຄົນ ຜູ້ຊຶ່ງເຕັມໄປດ້ວຍສະຕິປັນຍານັ້ນວ່າ:

- ຂ້ອຍເຊື່ອແຕ່ສິ່ງທີ່ໄດ້ຍິນກັບຫູໄດ້ດູກັບຕາເທົ່ານັ້ນ ແຕ່ບໍ່ທັນເຊື່ອໃນສິ່ງທີ່ເຈົ້າເວົ້າ ເທື່ອ. ຈົ່ງສະແດງລວດລາຍອັນພິດສະດານຂອງເຈົ້າອອກມາໃຫ້ເບິ່ງດູ.

ວານດິກບໍ່ໄດ້ຂີ້ຕົວະເລີຍ. ເຂົາກໍຈຸດພິເສດງູ ເດີຢີເຣີ ໄດ້ເປັນຢ່າງດີ. ກາງເວັນພວກ

ມັນດຸຮ້າຍ, ພໍແຕ່ຄ່ຳລົງມັນກໍກາຍມາເປັນຄ່ຽມຄິມແລະນອນນິດຈີ່ລີ່ຢູ່. ຕໍ່ຫນ້າຂອງຂ້າພະເຈົ້າ, ວານດິກປ່ອນມືເປືອຍທັງສອງເບື້ອງເຂົ້າໄປຍັງພຸ່ມໄມ້ຕ່າງໆເພື່ອຈັບພວກງູ ເດີຍເອີຢ່າງງ່າຍດາຍຄືເກັບເຫັດ, ແລ້ວເຂົາກໍເກັບງູເຂົ້າໃສ່ກົງປານວ່າເຮັດກັບພວກຫມານ້ອຍເກີດໃຫມ່ໆເອົາໂລດ. ແມ່ນແລ້ວ, ໃພງູກໍຕ້ອງຫາຄຳເຂົ້າໃສ່ປາກຕາມທີ່ໂຊກຊາຕາໄດ້ກຳນົດໃຫ້.

ກົງປ່ານຂອງ ວານດິກເຕັມແຕ່ງູຈົນໃຄ່ອ້ອງຕ່ອງຄືກັບຊົບຫມອນທີ່ຍັດນວມເຂົ້າໄປຈົນເຕັມຕຶ້ງ.

- ໄດ້ແລ້ວ, ເພື່ອນເອີຍ, ບາດນີ້ຈົ່ງປ່ອຍອອກໄປສາ, - ຂ້າພະເຈົ້າເວົ້າກັບວານດິກຢ່າງເຢັນກະດ້າງ - ຂ້ອຍຍອມຍົກເລີກຫນີ້ຫນຶ່ງດອນລ່າໃຫ້ເຈົ້າ ແລະຈະຕື່ມໃຫ້ອີກຫນຶ່ງ ຮູບີ. - ຂ້າພະເຈົ້າຈົກເງິນອອກມາຈາກກົງຫນຶ່ງຮູບີ. - ຈົ່ງຫນີໄປຈາກນີ້ດ້ວຍເງື່ອນໄຂທີ່ວ່າເຈົ້າຈະຕ້ອງບໍ່ປ່ອນຫົວເຂົ້າມາອຸທິຍານແຫ່ງນີ້ອີກຈັກເທື່ອ.

- ບໍ່ແລ້ວເວີຍ, - ວານດິກຫົວ. - "ສາດສະດາຈານງູ" ກໍຄືຊິບໍ່ຈົບຫາຍວາຍວອດໄປຍ້ອນເງິນທີ່ຈ່າຍເພື່ອຊື້ງູນຳຂ້ອຍບໍ່ພໍເທົ່າໃດປາຍເຊັ່ນນັ້ນດອກ. ນອກນັ້ນ ຂ້ອຍກໍຈະບໍ່ໄດ້ແຕະຕ້ອງເຖິງເງິນເດືອນອັນເລັກໆນ້ອຍໆຂອງເຈົ້ານັ້ນພໍອັດເລີຍ. ຕາບໃດໂຊກດີບໍ່ມາເຖິງຂ້ອຍແລ້ວຂ້ອຍກໍຍັງຈະບິນເຂົ້າມານີ້ອີກ...

ເຂົາກ່າວສຳນວນເຫລົ່ານີ້ອອກມາດ້ວຍຄວາມຈິງໃຈແລະອ່ອນໂຍນ ຈົນພາໃຫ້ຂ້າພະເຈົ້າເກີດຄວາມສົງສານຕໍ່ເຂົາ.

ຖ້າຂ້າພະເຈົ້າບໍ່ແຕະຕ້ອງງູຂອງເຂົາແລ້ວ ມື້ອື່ນເຂົາກໍຈະຂາຍງູໃຫ້ສາສະດາຈານໂດຍຜ່ານພວກເດັກນ້ອຍທີ່ເຂົາຈ້າງມາ, ແລ້ວເຂົາກໍຈະເຂົ້າຮ້ານອາຫານເປັນຄັ້ງທຳອິດພາຍຫລັງການອົດຫິວມາເປັນເວລາສີ່ມື້. ຖ້າຫາກຂ້າພະເຈົ້າຮ້ອງໂຮຂຶ້ນແລ້ວເຂົາກໍຈະບໍ່ຫວິດໄປຈາກການຈຳຄຸກຈຳຕະລາງເປັນແນ່...

ຂະນະນີ້ຊາຕາກຳຂອງ ວານດິກໄດ້ຕົກຢູ່ໃນກຳມືຂອງຂ້າພະເຈົ້າ. ຈະປ່ອຍເຂົາໄປຫລືບໍ່? ແຕ່ຄັນວ່າ ຄົນອັບປີຜູ້ນີ້ຫາກສືບຕໍ່ມາຢ້ຽມຢາມສວນອຸທິຍານອີກ ນາຍຈ້າງຂອງຂ້າພະເຈົ້າກໍ

ຄົງຈັດການກັບຂ້າພະເຈົ້າເປັນແນ່ ເພາະປ່ອຍໃຫ້ຊັບສົມບັດຂອງເພິ່ນຈິບຫາຍໄປເທື່ອລະເລັກລະນ້ອຍ.

- ເຈົ້າຈະບໍ່ກິນແຫນງດອກ, ເພື່ອນຜູ້ເອື້ອອາລີເອີຍ, ກ້າຫາກເຈົ້າຍັງມີເວລາເພື່ອໂອ້ລົມກັບຂ້ອຍ, - ເຂົາເວົ້າດ້ວຍນ້ຳສຽງໂສກລະທົມດັ່ງເດີມ, ວານດິກຕັດກະແສຄວາມຄິດຂອງຂ້າພະເຈົ້າໄປ. - ຂ້ອຍຂໍເວົ້າຄວາມຈິງກັບເຈົ້າວ່າ, ງູພວກນີ້ແມ່ນບໍ່ເກີດແຫ່ງຊີວິດຂອງຂ້ອຍ, ຂໍເຈົ້າຈົ່ງອະນຸຍາດບໍ່ໃຫ້ຂ້ອຍຫ່າງເຫີນກັບພວກມັນ. ຄວາມຈິງແລ້ວ ສຳລັບສາດສະດາຈານນັ້ນ ຄວາມເສຍຫາຍນີ້ ມັນກໍ່ບໍ່ພໍເທົ່າໃດດອກ... ຫາວງກເຮັດງານທຳໄດ້ແລ້ວ ຂ້ອຍກໍຈະຢຸດຕິການຊອກລັກຫາເລັ່ມແບບຕ່ຳຕ້ອຍນີ້ສາ.

ໃນວິນາທີນັ້ນ, ຂ້າພະເຈົ້າໄດ້ຄົ້ນຄິດຄືນເກິງຫລາຍໆບັນຫາ. ຂ້າພະເຈົ້າຄິດເຫັນຄວາມທໍລະມານແຫ່ງການອຶດຫິວຂອງຕົນເອງ, ມັນຄືກັນອ້ອຍຕ້ອຍກັບສະພາບຄວາມລຳບາກກາກກຳຂອງວານດິກ ໃນຂະນະນີ້. ຍ້ອນໃຈບໍ່ແຂງພໍ, ຂ້າພະເຈົ້າຈຶ່ງເຫັນດີກັບຄຳສະເຫນີຂອງຫມໍນັກເລງເຈົ້າມານຍາຄົນນັ້ນ.

- ຂ້ອຍອະນຸຍາດໃຫ້ເຈົ້າເອົາງູ ເດີຍີເຣີ ໃສ່ກົງໄປສິບໂຕ, - ຂ້າພະເຈົ້າມອດໄຟສາຍແລະເວົ້າກັບ ວານດິກ. - ເອົາໄປຂາຍສາ. ມື້ອື່ນເຈົ້າມີເງິນຊື້ແກງກິນແລ້ວກໍຂໍໃຫ້ເຈົ້າກິນແຊບເທາະ. ແຕ່ຕ້ອງໃຫ້ສັນຍາວ່າ: ອາທິດຫນຶ່ງຈະມາຈັບເອົາງູແຕ່ເທື່ອດຽວເທົ່ານັ້ນ.

- ຂອບໃຈນຳເຈົ້າ, - ວານດິກເວົ້າຂຶ້ນຢ່າງມ່ວນຊື່ນແລະໄຂກົງອອກມາ.

ມັນປ່ອຍງູອອກໄປຢ່າງວ່ອງໄວ. ພວກງູ ເດີຍີເຣີ ກຶກໂຍນໄປໃສ່ກນານກຍ້າຍູ່ໄກໆ, ຂ້າພະເຈົ້າໄດ້ຍິນສຽງງູຕົກລົງດິນ ປຶກ! ປຶກ ຢ່າງຊັດເຈນ.

- ຂ້ອຍມີຄວາມສຸກໃຈທີ່ສຸດທີ່ໄດ້ພົບພູຄວາມລຶ້ງແກວ່ນທີ່ມີມາແລ້ວກັບເຈົ້າ, - ວານດິກເວົ້າຈາປາໃສແບບໂລ່ງອົກໂລ່ງໃຈກ່ວາເກົ່າ, ມັນຊຶດກົງທີ່ລີບລົງແດ່ແລ້ວນັ້ນຂຶ້ນໃສ່ຫລັງ. - ຂ້ອຍເອົາແຕ່ແປດໂຕເທົ່ານັ້ນ. ສຳລັບຂ້ອຍສູ່ມື້ນີ້ສາບໍ່ກໍພໍ. ຂໍເຈົ້າຈົ່ງອະນຸຍາດໃຫ້ຂ້ອຍມາອຸທິຍານໃນມື້ວັນພຸດຫນ້ານີ້, ເພາະວັນພະຫັດເລີ່ມເປັນຍາມເດືອນເພັງ ແລ້ວ.

- ຫນີໄປໄວໆ, - ຂ້າພະເຈົ້າຮ້ອງຂຶ້ນຄ່ອຍໆ, - ຢາກມາມື້ໃດກໍຫາລະມາຫັ້ນ. ວັນພຸດ,

ຂ້ອຍຈະນອນແຕ່ຫນຶ່ງໂມງເຖິງສອງໂມງເຊົ້າ. ແຕ່ເວົ້າລວມແລ້ວ ຈົ່ງພະຍາຍາມຫນີຈາກດິນແດນຂອງພວກເຮົານີ້ໄປຕະຫລອດຊາດຍິ່ງໄວເທົ່າໃດກໍຍິ່ງດີ.

- ເຈົ້າເປັນຄົນມີເມດຕາປານີຢ່າງລົ້ນເຫລືອ! - ວານດິກເວົ້າສຽງຍາວແລ້ວຫາຍລັບໄປ.

ຂ້າພະເຈົ້າໄດ້ຍິນສຽງບາດຕີນອັນພ້າວພັ່ງນັ້ນຢ່າງຈັດເຈນ, ສຽງໂດດຂ້າມກຳແພງຄ່ອຍໆ, ແລ້ວທຸກສິ່ງທຸກຢ່າງກໍມິດງຽບລົງ.

ຄ່ຳຄືນຂອງລະດູຮ້ອນໂອບອ້ອມຂ້າພະເຈົ້າໄວ້ຢ່າງມິດງຽບ. ແຕ່ໃນໃຈຂອງຂ້າພະເຈົ້າໂສກເຫງົາແຄ້ນເຄືອງ. ຂ້າພະເຈົ້າສົງສານ ວານດິກ ແລະບໍ່ພໍໃຈກໍປານນັ້ນຕໍ່ຕົນເອງ.

## IV

- ນາງ ລີເຢີ, ເຈົ້າກໍຄືຊິບໍ່ຄິດຕີວ່າ ງູເດີຢີເອີ ກິນສັດຊະນິດໃດຊະນິດຫນຶ່ງເອົາໄປກິນ? - ທ່ານ ມິນໂຮຍເຊີ ເວົ້າກັບຄົນຊ່ວຍວຽກຂອງເພິ່ນ ໃນຂະນະທີ່ຂ້າພະເຈົ້າລາຍງານກ່ຽວກັບການສູນເສຍຂອງງູ ເດີຢີເອີ. - ເຖິງຈັ່ງໃດ ພວກເຮົາກໍຍັງມີຄວາມຮັບຮູ້ກ່ຽວກັບສັດເລືອຄານຫນ້ອຍເກີນໄປ. ເຈົ້າຄິດຈັ່ງໃດ, ປິນ?

- ຈຳເປັນຈະຕ້ອງໃຫ້ລຸງ ຫລື ຊ່ວຍຂ້ອຍ, - ຂ້າພະເຈົ້າຕອບ. - ມີສອງຄົນຈະຕິດຕາມໄດ້ງ່າຍກວ່າວ່າງູ ເດີຢີເອີເສຍໄປໃສ.

- ປິນເອີຍ, ເຈົ້າຍັງບໍ່ທັນຕີລາຄາຄວາມສາມາດຂອງເຈົ້າໄດ້ຫມົດ. ຂ້ອຍເຊື່ອວ່າເຈົ້າຈະຈັບເອົາງູໂຕທີ່ມັນລັກຫນີນັ້ນມາໄດ້. ແຕ່ຊ່າງເທາະ, ບໍ່ຄວນຈະໄປວິຕົກກັງວົນນຳເລື່ອງມະລິດປິດປີ້ນັ້ນ. ມື້ງນີ້, ຫລານຂອງຂ້ອຍ, ສາດສະດາຈານ ໂຣນເຊີ ຈະມານີ້, ແລະລາວຈະຈັດແຈງວຽກງານທຸກຢ່າງດອກ. ສ່ວນເຈົ້າ, ປິນເອີຍ, ເຈົ້າກະລຸນນາກະກຽມນ້ຳກົ່ນຕາມຕຳລານີ້ໃຫ້ແດ່...

ເຈ້ຍແຜ່ນຫນຶ່ງວາງໄວ້ຢູ່ເທິງໂຕະໃນຫ້ອງທົດລອງ. ຂ້າພະເຈົ້າແປກໃຈວ່າເຫດໃດສາດສະດາຈານຈຶ່ງຈຳຕ້ອງຈົດຕຳລາ: ເຊິ່ງຕາມປົກກະຕິ, ຂ້າພະເຈົ້າເຄີຍກະກຽມນ້ຳກົ່ນຕ່າງໆຕາມຄຳສັ່ງຂອງເພິ່ນມາແລ້ວ.

- ເຮັດໄວໆແດ່, - ທ່ານ ມິນໂຮຍເຊີ ເວົ້າດ້ວຍທ່າທາງເຄັ່ງຂຶມ. ເພິ່ນຫລຽວມາຫານາງ

ລີເຢີ ທີ່ພວມປະຕິບັດງານຢູ່ຂ້າງນັ້ນ ເພື່ອຈະສືບຕໍ່ຄວາມລົມທີ່ຖືກຕັດສະບັ້ນລົງຍ້ອນຂ້າພະເຈົ້າເຂົ້າມາ: - ລີເຢີ, ແນ່ນອນວ່າ ຫລານຂອງຂ້ອຍຈະເຮັດໃຫ້ເຈົ້າມີຄວາມຮັກແພງທີ່ສຸດ. ລາວເປັນຄົນທີ່ມີຄວາມສາມາດລ້ຳເລີດຜູ້ຫນຶ່ງ. ລາວເຄີຍດຳລົງຊີວິດຢູ່ເກາະ ຢາວາ ສອງສາມປີ, ໄດ້ຂຽນປຶ້ມເຫລັ້ມຫນຶ່ງກ່ຽວກັບພືດສາຊາດທີ່ກິນແມງໄມ້. ປະຈຸບັນນີ້ ລາວພວມເດີນທາງໄລຍະໄກໄປຍັງທະວີບໂອດສະຕາລີເພື່ອຄົ້ນຄ້ວາພືດສາຊາດຢູ່ຝັ່ງທະເລຕອນໃຕ້ໃນແຫ່ງດັ່ງກ່າວ. ໂຣນເຊີ ຢາກຂໍຄວາມເຫັນຈາກຂ້ອຍບາງສິ່ງບາງຢ່າງ. ບາງທີກໍຍ້ອນວ່າຂ້ອຍເປັນນັກບໍລິຫານງານທີ່ບໍ່ເກີງຂົນຂີ້ຮ້າຍກໍເປັນໄດ້.

- ແມ່ນແລ້ວ! - ຂ້າພະເຈົ້າຫລຸດປາກອອກມາຢ່າງບັງເອີນ.

ທ່ານ ມິນໂຮຍເຊີ ອ່ວາຍຫນ້າມາຫາຂ້າພະເຈົ້າຢ່າງຊ້າໆ:

- ບິນ, ເຈົ້າຍັງຢູ່ຫັ້ນຫວະ? ຂ້ອຍໂລດຄຶດວ່ານ້ຳກັ່ນຖືກກະກຽມຮຽບຮ້ອຍແລ້ວ. ນີ້ເດີ, ນາງ ລີເຢີ, ພວກເຮົາຈະສວຍໃຊ້ໂອກາດທີ່ ໂຣນເຊີ ມາຢາມໃນເວລາອັນສັ້ນໆນີ້ ເພື່ອກວດກາຄືນເບິ່ງການທົດລອງທີ່ຂ້ອຍໄດ້ເວົ້າກັບເຈົ້າ. ແລະໂອກາດດຽວກັນນີ້ ພວກເຮົາຈະຊອກຮູ້ຕື່ມກ່ຽວກັບງູ ເດີບີເອີ ນັ້ນໃຫ້ເກີງກົກເກີງຮາກ. ແນ່ນອນວ່າລາວຮູ້ຈັກດີ. ເພາະວ່າ...

ຂະນະນັ້ນ ນ້ຳກັ່ນກໍຖືກກະກຽມຮຽບຮ້ອຍແລ້ວ.

- ທ່ານ ສາດສະດາຈານ, ແລ້ວແລ້ວ, - ຂ້າພະເຈົ້າເວົ້າ.

ນາງ ລີເຢີ ແນມເບິ່ງຂ້າພະເຈົ້າຢ່າງບໍ່ເຕັມໃຈ.

- ເຈົ້າເຮັດໃຫ້ຂ້ອຍຕື່ນຫມົດ, ບິນເອີຍ!

- ຂອບໃຈເດີ ບິນ, - ສາດສະດາຈານເວົ້າ. - ຂ້ອຍຈະຕອງນ້ຳກັ່ນເອົາເອງດອກ.

ຂ້າພະເຈົ້າເຫລືອວຽກຢູ່ພຽງຢ່າງດຽວຄືກົ້ມຫົວຄຳນັບແລ້ວອອກຈາກຫ້ອງທົດລອງໄປ.

ໃນຕອນເຊົ້າຂອງສອງສາມມື້ຕໍ່ມາ, ລຸງຫລີເວົ້າກັບຂ້າພະເຈົ້າວ່າ:

- ຄືນນີ້ ຫລານຂອງເຈົ້ານາຍເຮົາມາຮອດ.

ຂ້າພະເຈົ້າຢາກເຫັນຫນ້າເຫັນຕາຂອງແຂກຜູ້ນີ້ຢ່າງຍິ່ງ, ແຕ່ຂະນະດຽວກັນນັ້ນຢູ່ທາງອຸທິຍານຍັງມີວຽກງານຫຍຸ້ງຢູ່ຫລາຍປະການ ດັ່ງນັ້ນຂ້າພະເຈົ້າຈຶ່ງບໍ່ສາມາດປະໄປໄດ້.

ປະມານສອງມື້ຕໍ່ມາ, ນາງ ລີເຢີ ສັ່ງໃຫ້ເອົາຄອກສັດຈຳນວນຫນຶ່ງອອກໄປຍັງບ່ອນທີ່ມີ

ແສງແດດ, ຂ້າພະເຈົ້າແລະພວກຊາວຈີນເຮັດວຽກນີ້ຈົນເຫື່ອໄຫລໄຄຍ້ອຍ. ໃນຂະນະທີ່ພວມຍ້າຍຄອກສັດອອກມານັ້ນ, ໂດຍຜ່ານປະຕູສວນ ຂ້າພະເຈົ້າກໍເຫັນຄົນແປກຫນ້າຜູ້ຫນຶ່ງພວມໂອ້ລົມກັບນາງລີເຍີຢູ່ເທິງລະບຽງເຮືອນ. ຄົນຜູ້ນັ້ນນັ່ງຢູ່ເທິງພະນັກ ຫັນຫລັງມາທາງຂ້າພະເຈົ້າ, ຍົກມືຍົກໄມ້ແລະປະກົດວ່າພວມເລົ່າເລື່ອງຊວນຫົວອັນໃດອັນຫນຶ່ງ, ເພາະນາງ ລີເຍີຫົວລັ່ນຂຶ້ນຈົນວ່າຢູ່ບ່ອນພວກຂ້າພະເຈົ້າພຸ້ນກໍໄດ້ຍິນສຽງຫົວຂອງນາງຢ່າງຈັດເຈນ.

- ຂ້າແດ່ພະຜູ້ເປັນເຈົ້າ...ຢ່າເຍີ, ອ້າຍໂຣນເຊີ! ເຈົ້າເຮັດໃຫ້ຂ້ອຍຫົວຈົນໄສ້ຂົດແລ້ວ!

ເປັນທີ່ຈະແຈ້ງແລ້ວວ່າ ຊາຍຄົນນັ້ນແມ່ນຫລານຊາຍຂອງສາດສະດາຈານເອງ. ແລະແນ່ໃຈວ່າ ເຈົ້ານາຍຂອງຂ້າພະເຈົ້າຮັກແພງ ໂຣນເຊີ ທີ່ສຸດ, ເພາະລຸງໂຫໄດ້ແຕ່ງອາຫານເຍື່ອງດີໆຢູ່ທາງເຮືອນຄົວ, ແລະໃນຂະນະທີ່ລາວນໍາເອົາເຄື່ອງມືຮັບປະທານອາຫານສາມຊຸດ ຜ່ານເຮືອນຂອງຂ້າພະເຈົ້າໄປສູ່ຫ້ອງຮັບປະທານຂອງສາດສະດາຈານນັ້ນ ລາວໄດ້ຂະຍິບຕາໃຫ້ແລະເວົ້າວ່າ:

- ຫລັງຈາກອາຫານທ່ຽງແລ້ວ ຂ້ອຍຍັງຈະເອົາອາຫານແຊບໆເຍື່ອງຫນຶ່ງມາໃຫ້ເຈົ້າ.

ນາງ ລີເຍີເຮັດວຽກຢູ່ໃນຫ້ອງທົດລອງຂອງຕົນຜູ້ດຽວ. ສາດສະດາຈານແລະຫລານຂອງເພິ່ນອັດປະຕູໄວ້ແລ້ວເຮັດວຽກຢູ່ໃນຫ້ອງສ່ວນຕົວຂອງທ່ານ ມິນໂຣຍເຊີ. ເຂົາເຈົ້າເຮັດວຽກຈົນເດິກຈົນດື່ນ. ຂ້າພະເຈົ້າເຫັນໄດ້ແຈ້ງວ່າ ປະຕູບ່ອງຢ້ຽມຫ້ອງເຮັດວຽກຂອງສາດສະດາຈານຍັງມີແສງດອກໄຟຮຸ່ງສະຫວ່າງ ຢູ່ໃນຂະນະທີ່ຂ້າພະເຈົ້າໄປປະຕິບັດຫນ້າທີ່ເວນຍາມສວນອຸທິຍານໃນຕອນກາງຄືນ. ການຄົ້ນຄ້ວາຂອງສາດສະດາຈານຮຽກຮ້ອງຕ້ອງການເຄື່ອງວັດຖຸປະກອບເປັນຈໍານວນຫລວງຫລາຍທີ່ສຸດ, ຄອນໆກໍເອົາໄປຈາກຫ້ອງລ້ຽງສັດທົດລອງຕ່າງໆ, ຄອນໆກໍເອົາຈາກສາງໄປ, ແລະມັນກໍເຮັດໃຫ້ຂ້າພະເຈົ້າຫຍຸ້ງຢູ່ເປັນວຸ້ນໆກັບວຽກງານເຫລົ່ານັ້ນ. ນາງ ລີເຍີ ຜູ້ຫນ້າສົງສານ ກໍເຮັດວຽກເຫລົ່ານັ້ນຈົນອ່ອນແອກແຫລກໄປ. ໃນທີ່ສຸດ ນາງ ລີເຍີ ກໍຫັນໃຈຜ່າວອອກມາດ້ວຍຄວາມຫວາງໃຈແລະເວົ້າກັບຂ້າພະເຈົ້າວ່າ:

- ໂຣນເຊີກັບໄປມົສເຊົ້ານີ້ແລ້ວເດ. ລາວເປັນຄົນທີ່ມີ ສະເຫນ່ບໍ່ຍອກ, ແມ່ນບໍ່ ປົນ?

- ຫນ້າເສຍດາຍທີ່ຂ້ອຍບໍ່ຖືກແນະນໍາໃຫ້ຮູ້ກັບທ່ານ ໂຣນເຊີ. ຂ້ອຍພຽງແຕ່ໄດ້ແນມເຫັນເພິ່ນຢູ່ລະບຽງຊື່ງ...

ນາງລີເຢີ ຫນ້າແດງຂຶ້ນ.

- ເຈົ້າກໍເຫັນຫວະ? ເອີ່, ລາວເປັນຄົນເລົ່າເລື່ອງມ່ວນທີ່ສຸດເລີຍ ທັງເປັນຄົນດີເລີດ!

ນາງຄັ້ນຄຶດຕຶກຕອງແລ້ວໃບຫນ້າຂອງນາງກໍກັບກາຍມາເປັນໂສກເສົ້າ.

- ຫນ້າເສຍດາຍທີ່ສຸດ ທ່ານ ໂຣນເຊີຟາວໄປໂພດ. - ຂ້າພະເຈົ້າເວົ້າດ້ວຍຄວາມຈິງໃຈ.

ຕຶກຕອນທ່ຽງ, ເມື່ອຂ້າພະເຈົ້າກັບມາທີ່ຫ້ອງທົດລອງ, ນາງ ລີເຢີ ກໍໃຫ້ການຕ້ອນຮັບຂ້າພະເຈົ້າດ້ວຍຄວາມກະວົນກະວາຍ.

- ເພື່ອເຫັນແກ່ພະຜູ້ເປັນເຈົ້າ, ຢ່າເຮັດອຶກກະທຶກຂຶ້ນແບບນັ້ນ, ປົນ. ເວົ້າຄ່ອຍໆແນ່, ຢ່າງຄ່ອຍໆແດ່...

- ມີເລື່ອງຫຍັງຫວະ? - ຂ້າພະເຈົ້າຖາມຢ່າງຊຸບຊິບ.

- ສາດສະດາຈານ ມົນໂຣຍເຊີ ບໍ່ສະບາຍ...

- ເປັນຫຍັງລະ? ງູກັດຫວະ?

- ບໍ່, ເປັນພະຍາດໄຂ້ຫມາກເຫລືອງ... ໄຂ້ຂຶ້ນແຮງທີ່ສຸດ... ເພິ່ນພວມນອນຫມົດສະຕິຢູ່...

ນ້ຳຕາຂອງຂ້າພະເຈົ້າຊຶມອອກມາຈາກສອງເບົ້າຕາ.

- ໂທ່? ຈະຕ້ອງເຊີນທ່ານຫມໍ...ຕ້ອງເຊີນມາແຕ່ ຮັງກູນ?

- ຄ່ຳພຸ້ນແລ້ວ ລົດໂອໂຕຈຶ່ງຈະກັບມາ, - ນາງ ລີເຢີເວົ້າຢ່າງຫງອຍເຫງົາ.

- ຊັ້ນຂ້ອຍຊິແລ່ນໄປຈ້າງມ້າມາແຕ່ຫມູ່ບ້ານເດີ, - ຂ້າພະເຈົ້າສະເຫນີຂຶ້ນດ້ວຍຄວາມຮ້ອນໃຈ.

ນາງ ລີເຢີ ຂະຍິກບ່າເຂົ້າດ້ວຍທ່າທາງວິຕົກ.

- ເອີ, ປົນ, ສາດສະດາຈານຮູ້ຈັກຕຳລາຢາສັກສິດໃນການຕ້ານພະຍາດໄຂ້ຫມາກເຫລືອງໄດ້ດີ. ຂ້ອຍຫາກໍສັກເຂັມທຳອິດໃຫ້ເພິ່ນ. ອີກຊົ່ວໂມງຫນຶ່ງຂ້ອຍຈະສັກເຂັມທີສອງ. ບາງທີເພິ່ນອາດຈະໄຂ້ຂຶ້ນອີກພຽງສອງສາມຄັ້ງເທົ່ານັ້ນແລ້ວ. ເພາະວ່າກ່ອນທີ່ເຈົ້າຈະມາເຖິງນີ້ນັ້ນ, ຂ້ອຍໄດ້ເປັນໄຂ້ຕັ້ງຮ້ອຍແປດພັນຢ່າງ, ແຕ່ສາດສະດາຈານເພິ່ນຍັງປົວໄດ້. ເພິ່ນມີທັດສະນະສະເພາະຂອງເພິ່ນຕໍ່ພະຍາດຊະນິດຕ່າງໆ, ແລະເພິ່ນກໍປົວເກັ່ງທີ່ສຸດ.

ທ່ານ ມິນໂຮຍເຊີເຈັບຢູ່ຕັ້ງດົນແລະທຸກສິ່ງທຸກຢ່າງໃນສະຖາບັນຄົ້ນຄວ້າແຫ່ງນັ້ນປະກົດວ່າລ້ວນແຕ່ຈົມຢູ່ໃນສະພາບອາໄລ. ນາງ ລີເຢີ ໂສກເສົ້າຫງ່ອມເຫງົາທີ່ສຸດແລະຂ້າພະເຈົ້າເຄີຍເຫັນຢາດນ້ຳຕາຍ້ອຍຍັ່ງຢູ່ເທິງໃບໜ້າທີ່ຈ່ອຍຜອມແລະຊີດຊຸງວລີງຂອງນາງ. ປະຈຸບັນນີ້ມີແຕ່ນາງຜູ້ດຽວເຮັດວຽກຢູ່ໃນຫ້ອງທົດລອງ. ຕອນບ່າຍເຂົາເຈົ້າກໍເອົາຈົດໝາຍມາສົ່ງ, ນາງ ລີເຢີ ໃຈ້ແຍກແຕ່ລະປະເພດແລ້ວນຳເອົາເຂົ້າໄປໄວ້ໃນຫ້ອງເຮັດວຽກໃຫ້ສາດສະດາຈານ. ນາງຈັດແຈງອາຫານການກິນໃຫ້ເພິ່ນເອງ ໂດຍແຕ່ລະຄືນນາງໄດ້ສັ່ງຢ່າງລະອຽດລະອໍກັບລຸງໂຫວ່າຄວນຈະກະກຽມຫຍັງໃຫ້ແດ່ສຳລັບເພິ່ນໃນມື້ຕໍ່ໄປ.

ເພື່ອຕອບຄຳຖາມຕ່າງໆຂອງຂ້າພະເຈົ້າກ່ຽວກັບສະພາບສຸຂະພາບຂອງສາດສະດາຈານນັ້ນ, ນາງ ລີເຢີ ພຽງແຕ່ແກວ່ງຫົວ, ແລະຂ້າພະເຈົ້າຮູ້ສຶກເຈັບຊ້ຳໃນຫົວໃຈເພາະແນ່ໃຈວ່າສາດສະດາຈານພວມຕົກຢູ່ໃນລະຫວ່າງຄວາມມີຊີວິດແລະຄວາມຕາຍ!

ຕອນເຊົ້າມື້ໜຶ່ງ, ນາງລີເຢີແລ່ນມາທີ່ ອຸທິຍານແລະຮ້ອງຂຶ້ນດ້ວຍຄວາມກະຕືລືລົ້ນ:

- ສາດສະດາຈານຄ່ອຍໆຫາຍຈາກພະຍາດແລ້ວ! ນີ້ເພິ່ນຫາຂ້ອຍເອົາເຈ້ຍໃບນີ້ມາໃຫ້ເຈົ້າ.

ຂ້າພະເຈົ້າອ່ານຕົວອັກສອນໃນຈົດໝາຍນັ້ນດ້ວຍຄວາມມ່ວນຊື່ນ:

"ປິນທີ່ຮັກແພງ! ພະຍາດໄຂ້ໄດ້ອາລະວາດຂ້ອຍຢ່າງໜັກ, ແຕ່ປະຈຸບັນນີ້ຂ້ອຍພວມຟື້ນແຮງຄືນມາ. ຫວັງວ່າຈະສາມາດພົບກັບເຈົ້າໃນບໍ່ຊ້ານີ້. ຂ້ອຍສົນໃຈເຖິງວຽກງານທີ່ເຈົ້າເຮັດນັ້ນທີ່ສຸດ. ຈົ່ງອ່ານປຶ້ມທີ່ນາງ ລີເຢີຈະເອົາໃຫ້ເຈົ້າ. ເຈົ້າຈະຕ້ອງຮຽນ, ຖ້າບໍ່ຢາກເປັນຄົນເຝົ້າສວນຕະຫລອດຊີວິດ".

- ຂ້ອຍເອົາປຶ້ມນັ້ນໄວ້ຢູ່ເທິງລະບຽງເຮືອນເຈົ້າຫັ້ນ. ຈົ່ງຄົ້ນຄວ້າມັນ. ເລີ່ມຕົ້ນຕຽມຕົວເຮັດວຽກງານວິທະຍາສາດສາ, ປິນ, - ນາງລີເຢີ ເວົ້າຕື່ມແລ້ວກໍຟ້າວກັບໄປຍັງຫ້ອງທົດລອງ.

ຂ້າພະເຈົ້າຮ້ອນໃຈຢາກຮູ້ວ່າ ສາດສະດາຈານເພິ່ນບອກໃຫ້ຂ້າພະເຈົ້າອ່ານປຶ້ມຫຍັງ, ຍ້ອນແນວນັ້ນຂ້າພະເຈົ້າຈຶ່ງແລ່ນປານບິນເມືອເຮືອນ. ຢູ່ເທິງໂຕະ, ຂ້າພະເຈົ້າເຫັນປຶ້ມ "ຄວາມລັບຕ່າງໆກ່ຽວກັບຊີວະວິທະຍາ" ວາງໄວ້. ປຶ້ມນັ້ນດູດດຶງໃຈຂ້າພະເຈົ້າແຕ່ໜ້າທຳອິດ

ນັ້ນໂດ. ຢູ່ວິທະຍາໄລດີຍັງ, ເຂົາເຈົ້າສອນໃຫ້ພວກຂ້າພະເຈົ້າວິທີສະຫລຸບຫຍໍ້ເນື້ອໃນຂອງປຶ້ມແຕ່ລະເຫລັ້ມທີ່ໄດ້ອ່ານແລ້ວ, ຄັດເອົາຕອນທີ່ເປັນຫນ້າສົນໃຈທີ່ສຸດຂຶ້ນມາ. ຍ້ອນວ່າຫລາຍບັນຫາຖືກຫລົງລືມໄປ, ແຕ່ແກວຫນັງສືຕ່າງໆທີ່ຈົດໄວ້ຢ່າງຫຍໍ້ນັ້ນເຄີຍຊ່ວຍໃຫ້ເຮົາຟື້ນຟູເນື້ອໃນທັງຫມົດຂອງປຶ້ມນັ້ນຂຶ້ນມາໄດ້ໃນຄວາມຊົງຈຳ.

ແລ້ວຂ້າພະເຈົ້າກໍເລີ່ມບັນທຶກບາງຕອນໃນປຶ້ມ "ຄວາມລັບກ່ຽວກັບຊີວະວິທະຍາ" ນັ້ນໃສ່ປຶ້ມບັນທຶກໄວ້. ປຶ້ມໄດ້ຕັ້ງບັນຫາກ່ຽວກັບເຫດຜົນຕ່າງໆທີ່ກໍ່ໃຫ້ເກີດພະຍາດໃນພືດ, ສັດແລະມະນຸດ. ປະຈຸບັນນີ້ຂ້າພະເຈົ້າພວມທວນຄືນເຖິງສິ່ງຕ່າງໆທີ່ຂ້າພະເຈົ້າໄດ້ຈົດກ່າຍເອົາໄວ້ໃນເວລານັ້ນ.

"ຜ່ານຈາກກ້ອງຈຸລະທັດ, ເຮົາຈະສາມາດແນມເຫັນແມ່ພະຍາດຕ່າງໆ, ຕົວການທີ່ກໍ່ໃຫ້ເກີດພະຍາດຕິດແປດ, - ນັ້ນແມ່ນຄວາມລັບເຊິ່ງປະຈຸບັນນີ້ ສາມາດຄົ້ນພົບໄດ້ພຽງເຄິ່ງດຽວ".

"ຍັງມີພະຍາດຕິດແປດຕ່າງໆທີ່ບໍ່ແມ່ນແມ່ພະຍາດ, ແຕ່ມັນແມ່ນ ວີຣຸດເປັນຜູ້ກໍ່ຂຶ້ນ".

"ວີຣຸດ ແມ່ນຫຍັງ? ທຸກໆບໍ່ເກີດແຫ່ງພະຍາດຕິດແປດທຸກຢ່າງເວົ້າທົ່ວໄປແລ້ວລ້ວນແຕ່ເອີ້ນວ່າ ວີຣຸດ. ຄວາມລັບຂອງ ຊີວະວິທະຍາ ແມ່ນອັນທີ່ເອີ້ນກັນວ່າ ວີຣຸດທີ່ລອດຈາກການກັ່ນຕອງ, ພວກມັນສາມາດລອດຜ່ານເຄື່ອງກັ່ນຕອງທີ່ມີຄວາມກົດດັນສູງຊຶ່ງແມ່ພະຍາດທຳມະດາບໍ່ສາມາດເລັດລອດໄປໄດ້".

"ປີ ໑໘໙໒, ນັກປາດໂຊວຽດ ອີວານົບສະກີ, ໄດ້ເອົາທາດນ້ຳທີ່ບີບເອົາມາຈາກໃບຕົ້ນຢາສູບທີ່ຖືກພະຍາດກະດັນຕາບົ້ງ. ພຽງແຕ່ປະລິມານນ້ອຍສຸດຂອງນ້ຳດັ່ງກ່າວກໍສາມາດເຮັດໃຫ້ຕົ້ນທີ່ຍັງແຂງແຮງຢູ່ຕິດພະຍາດໄດ້. ອີວານົບສະກີ ຢາກຮູ້ຈັກຈະແຈ້ງວ່າ ແມ່ນຫຍັງເປັນຕົວການກໍ່ໃຫ້ເກີດພະຍາດກະດັນຕາບົ້ງໃນຕົ້ນຢາສູບ, ອາດຈແມ່ນແມ່ພະຍາດບໍ່? ຖ້າເປັນຈັ່ງຊັ້ນກໍອາດຈະແນມເຫັນພວກມັນໄດ້ຈາກກ້ອງຈຸລະທັດ, ແລະສາມາດຄົ້ນຄ້ວາລັກສະນະພິເສດຂອງພວກມັນໄດ້ຢູ່ໃນຫ້ອງທົດລອງ, ເພື່ອແຍກເຊື້ອພັນວີຣຸດທີ່ບໍລິສຸດອອກມາ".

"ກ້ອງຈຸລະທັດບໍ່ສາມາດຄົ້ນພົບແມ່ພະຍາດກະດັນຕາບົ້ງໄດ້. ອີວານົບສະກີເອົານ້ຳທີ່ບີບອອກມາຈາກໃບຂອງຕົ້ນທີ່ເປັນພະຍາດນັ້ນ, ແລ້ວເອົາໄປກັ່ນຕອງຜ່ານຕາຫນ່າງຕອງທີ່ມີຮູນ້ອຍເຖິງຂັ້ນວ່າບໍ່ມີແມ່ພະຍາດຊະນິດໃດ, ເຖິງວ່າຂະຫນາດຂອງມັນຈະນ້ອຍເຖິງຂັ້ນໃດກໍຕາມ,

ຈະສາມາດລອດຜ່ານໄປໄດ້. ແຕ່ນ້ຳທີ່ຖືກບີບ ມານັ້ນໄດ້ຮັບການຕອງແມ່ພະຍາດອອກຢ່າງສະອາດ ແຕ່ປານນັ້ນ ພະຍາດກະດັນຕາບົ້ງກໍຍັງສາມາດຕິດແປດຕົ້ນຢາສູບທີ່ຍັງແຂງແຮງນັ້ນໄດ້ຢ່າງສົມບູນ".

"ເຈັດປີຕໍ່ມາ, ໃນປີ ໑໘໙໙ ພວກນັກປາດທັງຫລາຍຈຶ່ງຮູ້ວ່າ ວິຣຸດເປັນປະກົດການໃຫມ່ທີ່ບໍ່ທັນຄົ້ນພົບມາກ່ອນ. ແລະເລີ່ມແຕ່ນັ້ນມາ ກໍເລີ່ມມີການຄົ້ນພົບທີ່ນັບມື້ນັບເຮັດໃຫ້ນັກວິທະຍາສາດເຮົາເກີດມີຄວາມອັດສະຈັນ".

"ນັບແຕ່ປີ ໑໕໕໔, ໃນສວນຕົ້ນໄມ້ຕ່າງໆທີ່ ຕວກກີ, ເຂົາເຈົ້າໄດ້ປູກຕົ້ນດອກຕູລີບາງົດງາມທີ່ສຸດ, ມີຈ້ຳມຶກແລະລວດລາຍຢູ່ເທິງກີບດອກຂອງມັນ. ເຂົາເຈົ້າຖືວ່ານັ້ນແມ່ນແຕ່ສັນຍາລັກປະຈຳພັນຊື່ໆ. ຜ່ານເວລາເປັນຮ້ອຍໆປີຕໍ່ມາ ເຂົາເຈົ້າຈຶ່ງສາມາດປະສົມພັນຕົ້ນດອກໄມ້ຕູລີປາ ນັ້ນອອກມາໄດ້ເປັນພັນໆຊະນິດ. ແຕ່ຈ້ຳມຶກຕ່າງໆຂອງບັນດາຕົ້ນ ຕູລີປານັ້ນມັນຊ້ຳແມ່ນປະກົດການອັນຫນຶ່ງຂອງພະຍາດທີ່ວິຣຸດກໍ່ຂຶ້ນ. ບັນຫານີ້ໄດ້ຮັບການຢັ້ງຢືນຢ່າງຈະແຈ້ງໃນປີ ໑໙໔໘".

"ວິຣຸດ ແມ່ນຕົວການກໍ່ໃຫ້ເກີດພະຍາດຫລາຍຢ່າງ, ບາງເທື່ອກໍ່ໃຫ້ເກີດພະຍາດທີ່ຫນັກຫນ່ວງທີ່ສຸດ. ສົມມຸດຄືພະຍາດຫມາກແດງ, ຫມາກສຸກນັ້ນແມ່ນເກີດຈາກ ວິຣຸດ. ພະຍາດຕ່າງໆເຊັ່ນພະຍາດກະດັນ, ພະຍາດຂາດເລືອດຂອງມ້າ, ພະຍາດສະຫມອງອັກເສບຂອງສັດປະເພດໃຫ້ຫນັງ, ໃຫ້ຂົນອື່ນໆ ກໍລ້ວນແຕ່ແມ່ນ ວິຣຸດເປັນຜູ້ກໍ່ຂຶ້ນ. ພະຍາດກະດັນປາແກງ, ພະຍາດຫນອນນາງເຜີ້ງແລະບັນດາພະຍາດຂອງໂຕມ້ອນກໍເຊັ່ນກັນ. ນັ້ນແມ່ນ ວິຣຸດເອງທີ່ໄດ້ທຳລາຍຕົ້ນໄມ້ຕົ້ນຫຍ້າໄປເປັນຈຳນວນຫລວງຫລາຍ. ພືດພັນທັນຍາຫານທັງຫມົດ, ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ກິນຫມາກ ລ້ວນແຕ່ຖືກວິຣຸດຊະນິດຕ່າງໆຂົ່ມຂູ່ທັງນັ້ນ".

ຂ້າພະເຈົ້າເອງກໍເຄີຍພົບເຫັນພະຍາດກະດັນຕາບົ້ງຂອງຕົ້ນຢາສູບ ແລະຮູ້ແຈ້ງວ່າມັນຈະທຳລາຍແລະກໍ່ຄວາມເສຍຫາຍຂຶ້ນຄືແນວໃດແລ້ວ. ວິຣຸດຊະນິດຕ່າງໆແມ່ນສັດຕູຕົວອັນຕະລາຍຮ້າຍກາດ. ຄັນຊັ້ນທາດແທ້ຂອງວິຣຸດແມ່ນຫຍັງ?

"ວິຣຸດນັ້ນບໍ່ສາມາດແນມເຫັນໄດ້, ການກະທົບຕ່າງໆຂອງມັນຍັງນອນຢູ່ໃນວົງເລັບຂອງຄວາມລັບ. ທາດແທ້ຂອງມັນຍັງບໍ່ເປັນທີ່ຈະແຈ້ງເທື່ອ..." – ໃນປຶ້ມໄດ້ເວົ້າໄວ້ແບບນັ້ນ.

ຂ້າພະເຈົ້າພວມຄົ້ນຄ້ວາປຶ້ມນັ້ນຢ່າງເພິ່ງມິວ. ແຕ່ໃນຂະນະນັ້ນ ງູ ມູຊູຣານ, ງູປະເພດທີ່ມີລາຍແຊກຍາວນັ້ນພວມແຜ່ພາຍຂະຫຍາຍອອກເປັນຈຳນວນຫລວງຫລາຍ. ຈະຕ້ອງຈັບເອົາມັນອອກຈາກອຸທິຍານໄປ. ເທື່ອຫນຶ່ງໃນຂະນະທີ່ພວມຈັບງູຢູ່ນັ້ນ, ຂ້າພະເຈົ້າໄດ້ຍິນນາງ ລີເຢີເວົ້າດັ່ງໆ:

- ຮີບສົ່ງໂທລະເລກດ່ວນໄປໃຫ້ສາດສະດາຈານ ໂຣນເຊີ!

ນາງອອກຄຳສັ່ງໃຫ້ຄົນຮັບໃຊ້ຜູ້ຫນຶ່ງທີ່ພວມກຽມຕົວໄປ ຮ້ານກູນໃນຍາມທີ່ຜິດປົກກະຕິ.

- ຈົ່ງເວົ້າກັບຫ້ອງການໂທລະຄົມມະນາຄົມ ເພື່ອບໍ່ໃຫ້ເຂົາຫລົງບ່ອນຢູ່. ຈື່ດີໆເດີ: ໂຣນເຊີມາຊາດລານ.

ຈັກຈັ່ງໃດບຸ, ຄວາມວ່າ "ມາຊາດລານ" ຈຶ່ງຝັງເລິກຢູ່ໃນມັນສະຫມອງຂອງຂ້າພະເຈົ້າ, ແລະຂ້າພະເຈົ້າກໍຈື່ຈຳໄດ້ຕະຫລອດການ. ກ້າວ່າບໍ່ຄຶດເຖິງແລ້ວຈະດີກ່ວາ, ເພາະມັນນັ້ນແລ້ວທີ່ໄດ້ເອົາການພະຈົນໄພພິດສະດານມາສູ່ຂ້າພະເຈົ້າ.

ຄືນນັ້ນຂະນະທີ່ຂ້າພະເຈົ້າເວນຍາມສວນອຸທິຍານຢູ່ນັ້ນ ຂ້າພະເຈົ້າແນມເຫັນປະຕູບ່ອງຢ້ຽມທີ່ຮຸ່ງສະຫວ່າງດ້ວຍແສງໄຟໃນຫ້ອງເຮັດວຽກຂອງສາດສະດາຈານ ມົນໂຮຍເຊີ, ພວກເຈຍຮ້ອງຈິດໆບິນໄປບິນມາຢູ່ນອກປະຕູບ່ອງຢ້ຽມ. ແຕ່ເປັນທີ່ຊັດແຈ້ງວ່າ ສາດສະດາຈານບໍ່ໄດ້ສົນໃຈຫຍັງເລີຍນຳພວກເຈຍເຫລົ່ານັ້ນ. ຜ່ານຈາກມ່ານກັ້ງບ່ອງຢ້ຽມນັ້ນສາມາດແນມເຫັນເງົາຂອງເພິ່ນຊຶ່ງພວມນັ່ງອ່ານປຶ້ມຢູ່ຢ່າງເມີນມິວ.

ຄືນນັ້ນເລື່ອນເລີຍໄປໂດຍດີຄືຄືນກ່ອນໆ, ພວກງູ ເດີຍີເຣີ ກໍຍັງຄືບກ້ວນຢູ່, ຍິ່ງກ່ວານັ້ນຍັງເລີ່ມອອກໄຂ່ໄວ້ໃນຂີ້ຊາຍອີກ. ຂໍພຽງແຕ່ໄຂ່ເຫລົ່ານັ້ນແຕກອອກເປັນງູນ້ອຍກ່ອນເທາະ, ວານດີກຢາກລັກເອົາໄປທີ່ໃດກໍຊ່າງ. ສະກາບັນຄົ້ນຄ້ວາຈະເຊົາຊື້ແລະບໍ່ຮັບຊື້ງູເດີຍີເຣີອີກ. ມີງູຂອງຕົນສ່ຳນັ້ນກໍເຫລືອເຟືອແລ້ວ.

ແຕ່ ວານດີກ ບໍ່ໄດ້ມາປະກົດຕົວອີກ. ບາງທີເຂົາອາດຄຶດຢ້ານຈະພົບກັບຂ້າພະເຈົ້າກໍເປັນໄດ້.

## V

ນາງ ລິເຢີ ໄດ້ໃຫ້ຂໍ້ສັງເກດກ່ຽວກັບບາດກ້າວແຫ່ງຄວາມກ້າວຫນ້າຂອງຂ້າພະເຈົ້າ.

- ມື້ນີ້ ຂ້ອຍໄດ້ລົມກັບສາດສະດາຈານກ່ຽວກັບເລື່ອງຂອງເຈົ້າ, - ນາງເວົ້າໃນຂະນະທີ່ໄປຢາມຂ້າພະເຈົ້າຢູ່ສວນອຸທິຍານ. ເຈົ້າມີຄວາມຮູ້ຈຳນວນຫນຶ່ງກ່ຽວກັບບົວຊະນິດຕ່າງໆແລ້ວ, ແນ່ນອນວ່າພວກຂ້ອຍຈະຍ້າຍເຈົ້າຂຶ້ນໄປຫ້ອງທົດລອງໃນມື້ໆນີ້.

- ຍານາງ, ສຸຂະພາບຂອງສາດສະດາຈານເປັນຈັ່ງໃດແລ້ວ, - ຂ້າພະເຈົ້າຖາມ.

- ເພິ່ນມໍ່ຈະດີເປັນປົກກະຕິແລ້ວ. ຫລັງຈາກເຈັບມານີ້ ເພິ່ນເລີຍແສງຕາອ່ອນ. ເພິ່ນທົນຕໍ່ແສງສະຫວ່າງຂອງດວງອາທິດບໍ່ໄດ້ ແລະຈຳເປັນຕ້ອງເຮັດວຽກຢູ່ພາຍໃຕ້ແສງໂຄມ. ມີຫລາຍເທື່ອ ຂ້ອຍໄດ້ສະເຫນີໃຫ້ເພິ່ນຮັກສາຕາ! ເຖິງແມ່ນວ່າ ຂ້ອຍສາມາດອ່ານດັງໆໃຫ້ເພິ່ນຟັງ, ແຕ່ເພິ່ນບໍ່ຍອມຟັງຄວາມເວົ້າຂອງຂ້ອຍ. ແລະຄືນໃດກໍນັ່ງອ່ານປຶ້ມຢູ່ໃນຫ້ອງ.

- ເພິ່ນເຮັດວຽກເດິກຫລາຍ. ແລະນັ່ງຢູ່ໃນຫ້ອງຈົນຮອດແຈ້ງ, - ຂ້າພະເຈົ້າເວົ້າ. - ປະຕູປ່ອງຢ້ຽມຫ້ອງຂອງເພິ່ນຍາມໃດກໍມີແສງໂຄມຮຸ່ງຢູ່ສະເຫມີ. ເບິ່ງຄືວ່າເພິ່ນພວມນັ່ງອ່ານຢູ່.

- ອາ, ເຈົ້າເຫັນຈັ່ງຊັ້ນຫວະ? - ນາງ ລິເຢີ ຖາມຢ່າງກະຕືລືລົ້ນ.

- ຈ້າວ, - ຂ້າພະເຈົ້າຢືນຢັນ.

ຂ້າພະເຈົ້າອຸກໃຈທີ່ສຸດເພາະສາດສະດາຈານບໍ່ອອກຈາກຫ້ອງຈັກເທື່ອເລີຍ. ມີແຕ່ເຈ້ຍແຜ່ນຕ່າງໆທີ່ເພິ່ນຫານາງ ລິເຢີມາສົ່ງໃຫ້ນັ້ນເທົ່ານັ້ນທີ່ເປັນແຫລ່ງອົບອຸ່ນກຳລັງໃຈໃຫ້ຂ້າພະເຈົ້າ. ແນ່ນອນວ່າເພິ່ນພວມຄ່ອຍໆຟື້ນຕົວເປັນປົກກະຕິຂຶ້ນມາ. ເພາະທຸກໆເທື່ອໄປຍາມອຸທິຍານໃນຕອນກາງຄືນນັ້ນ, ແນມຜ່ານຜ້າກັ້ງປ່ອງຢ້ຽມເຂົ້າໄປ, ຂ້າພະເຈົ້າຍ່ອມຈະເຫັນເພິ່ນນັ່ງອ່ານປຶ້ມຢູ່ຢ່າງເມົາມົວ.

ເພິ່ນນັ່ງຢູ່ຢ່າງບໍ່ເຫນັງບໍ່ຕີງ. ຂ້າພະເຈົ້າຄິດ: "ຈັ່ງຊັ້ນຈຶ່ງແມ່ນຄົນຜູ້ຮູ້ຈັກເຮັດວຽກທຳງານ. ລືມຫມົດທຸກຢ່າງເພື່ອວິທະຍາສາດ".

ຂ້າພະເຈົ້າຄິດຫລາຍສິ່ງຫລາຍຢ່າງກ່ຽວກັບທ່ານ ມົນໂຮຍເຊີເລື້ອຍໆ. ເພິ່ນປະພຶດຕົວຕໍ່ຂ້າພະເຈົ້າດີເປັນພິເສດ. ເພິ່ນໃຫ້ບ່ອນຢືນອັນເຫມາະສົມແກ່ຂ້າພະເຈົ້າ...ໃນເວລາເຈັບປ່ວຍເພິ່ນກໍຄົງຈົ່ງເວລາໄວ້ຕິດຕາມວຽກງານຂອງຂ້າພະເຈົ້າ, ແຕ່ກໍຍາກທີ່ເພິ່ນຈະໃຊ້ເວລາໂອ້ລົມ

ກັບຂ້າພະເຈົ້າ, ແລະຂ້າພະເຈົ້າຮູ້ສຶກວ່າເພິ່ນສັງເກດເບິ່ງຂ້າພະເຈົ້າຢູ່ໄກໆສະເຫມີມາ, ເກືອ ແມ່ນວ່າ ຖ້າເພິ່ນເຂົ້າຫາຂ້າພະເຈົ້າໂດຍກົງນັ້ນຍ່ອມຈະດີກວ່າກໍຕາມ. ແຕ່ບາງເທື່ອ ເພິ່ນອາດ ມີນິດໃສປະພຶດດີຕໍ່ທຸກໆຄົນແນວນັ້ນບໍ່. ອີກຢ່າງຫນຶ່ງ ເພິ່ນກໍຫຍຸ້ງວຽກຫລາຍໂພດ, ເພິ່ນບໍ່ ອາດຈະໄປໂອ້ລົມກັບຄົນເຝົ້າສວນຂອງດິນທຸກມື້ໄດ້.

ຄືນຫນຶ່ງ ວານດິກ ບິນຮົ້ວເຂົ້າມາຈັບງູ່ຢູ່ໃນອຸທິຍານອີກ.

- ຂ້ອຍພອນໃຫ້ເຈົ້າເຂົ້າມາລັກດ້ວຍຄວາມສະຫວັດດີພາບ. - ຂ້າພະເຈົ້າທັກທາຍເຂົາ ດ້ວຍສຽງຂຸ່ນເຄືອງໃນຂະນະທີ່ເຂົາບິນກຳແພງເຂົ້າອຸທິຍານມາໃນເວລາຫນຶ່ງໂມງກາງຄືນ.

- ບິນ, ຂໍຂອບໃຈນຳເຈົ້າ, - ວານດິກ ຕອບຢ່າງສຸພາບ.

- ເຈົ້າຮູ້ຈັກຊື່ຂ້ອຍຫວະ? - ຂ້າພະເຈົ້າແປກໃຈ.

- ການທີ່ຂ້ອຍຮູ້ຈັກຊື່ "ຄົນເບົາກວ່າອາກາດ" ນັ້ນມັນຊິມີຫຍັງແປກ? ເວລານັ້ນ, ຂ້ອຍ ໃຊ້ເງິນດອນລ່າສຸດທ້າຍເພື່ອໄປຊື້ບ່ອນນັ່ງຫນຶ່ງໃນ "ໂກໂລເຊອຸມ" ແລະກໍຈື່ເຈົ້າໄດ້ໂລດ. ເວົ້າໃຫ້ຖືກແລ້ວ, ເວລາເຈົ້ານອນໃນອູ່ນັ້ນ, ເຈົ້າມີທ່າທາງກະວົນກະວາຍຢູ່.

ເຂົາຄານເຂົ້າໄປໃນພຸ່ມໄມ້ຄ່ອຍໆແລະວ່ອງໄວ.

- ນີ້ບິນ, ງູ ເດີຍີເຣີ ຫນີໄປໃສຫມົດແລ້ວ? - ເຂົາເວົ້າກັບຂ້າພະເຈົ້າດ້ວຍນ້ຳສຽງບໍ່ພໍ ໃຈ. - ແລະເວົ້າລວມແລ້ວ...ປະກົດວ່າເຈົ້າຕັ້ງແກ້ງບ່ອຍງູພິດທະວີບໂອດສະຕາລີເຂົ້າມານີ້ ແມ່ນບໍ່.

- ວານດິກ, ຂ້ອຍພວມຈະບອກໃຫ້ເຈົ້າຮູ້ວ່າປະຈຸບັນນີ້ງູ ເດີຍີເຣີ ນອນຢູ່ທາງກຳແພງ ທິດໃຕ້ພຸ້ນ.

ຄຳເວົ້າຂອງເຈົ້າຈະຊ່ວຍໃຫ້ຂ້ອຍປະຕິບັດການຊອກພວກພິເພດນີ້ໄດ້ໄວ. - ວານດິກ ຂອບໃຈຄັກແນ່ແລ້ວໂດດຍ້ອດຂ້າມຮ່ອງໄປ. ມັນຈັບງູໃສ່ເຕັມກົງໄດ້ຢ່າງໄວວາ.

- ຫ້າມບໍ່ໃຫ້ເອົາເກີນຫ້າໂຕ, - ຂ້າພະເຈົ້າບີບໄຟສາຍເພື່ອເປັນການກ່າວເຕືອນເຂົາ. - ເບິ່ງເຈົ້າຊິຈັບເອົາໄປຈັກໂຕ?

ວານດິກ ໄຂກົງອອກມາ.

- ພໍດີຫ້າໂຕ. ຂໍແຈ້ງໃຫ້ຮູ້ເລີຍວ່າຂ້ອຍຈະກຸ້ມອາຊີບນີ້ແລ້ວ. ສາດສະດາຈານຂອງເຈົ້າ

ປ່ວຍ, ສ່ວນສາວເກົ້າ ລີເຢີນັ້ນ ຊໍ້າບໍ່ຕ້ອງການຊື້ງ. ນີເພື່ອນເອີຍ, ຖ້າເຈົ້າຫາກປະກອບສ່ວນໃຫ້ການຊ່ວຍເຫລືອແກ່ຄົນຫວ່າງງານຜູ້ນີ້ແລ້ວ ແມ່ນດີທີ່ສຸດ. ເອີ່ນ, ທ່ານ ມິນໂຮຍເຊີຂອງເຈົ້າປ່ວຍເພາະພະຍາດຫຍັງລະ?

- ເພິ່ນເປັນໄຂ້, ປະຈຸບັນນີ້ພວມຄ່ອຍໆພື້ນຕົວຄືນ, ແຕ່ເພິ່ນຍັງບໍ່ອອກຈາກຫ້ອງເລີຍ.

- ໂທ່ເອີຍ, - ວານດິກ ເວົ້າແລະຂໍອະນຸຍາດສູບຢາ. - ຂໍສູບສອງສາມປົກດອກ. ຂ້ອຍເຄີຍສູບກອກ, ສູບແກ້ຫິວ. - ມັນຂີດກັບໄຟຢ່າງລະມັດລະວັງແລະຄວັນຢາກໍລະເຫີຍອອກມາ. - ເປັນຫຍັງສາດສະດາຈານຈຶ່ງເກີງກັບເປັນໄຂ້ຫມາກເຫລືອງ? ດົນແລ້ວຫວະ?

- ເປັນໃນມື້ທີ່ຫລານຂອງເພິ່ນອອກໄປນັ້ນແລ້ວ. ແຕ່ຈັ່ງໃດ, ເຈົ້າສອບສວນຂ້ອຍຫວະ ?
- ຂ້າພະເຈົ້າເກີດໂມໂຫຂຶ້ນມາທັນທີ. - ກັບເມືອສາ.

- ປີນເອີຍ, ເຈົ້າເປັນຄົນໃຈດີ. ແຕ່ມີອາລົມຫງຸດຫງິດມັກຮ້າຍຂະຫນາດ, - ວານດິກຕອບດ້ວຍຄວາມຈິງໃຈແລະອ່ອນໂຍນ. - ຂ້ອຍບໍ່ມີວັນລືມບຸນຄຸນຂອງເຈົ້າທີ່ມີຕໍ່ຂ້ອຍໃນເທື່ອກ່ອນ. ແຕ່ຂ້ອຍຊິເລົ່າໃຫ້ຟັງຊໍ້າສາ...ຂ້ອຍຮູ້ຈັກຫລານຂອງທ່ານ ມິນໂຮຍເຊີ, ແຕ່ກໍບໍ່ໄດ້ຂ່າວລາວດົນແລ້ວ. ລາວແມ່ນຄົນທີ່ປະເສີດຜູ້ຫນຶ່ງ.

- ແມ່ນແລ້ວ, - ຂ້າພະເຈົ້າຢືນຢັນ. - ເພິ່ນເປັນນັກປາດທີ່ມີຊື່ສຽງ, ເຄີຍຂຽນປຶ້ມເຫລັ້ມຫນຶ່ງ, ເຄີຍດຳລົງຊີວິດຢູ່ເກາະຍາວາ...

- ແມ່ນແລ້ວ, ລາວນັ້ນແລ້ວ. ລາວເປັນຄົນດີແລະມີເມດຕາຈິດ. ນີ ປີນເອີຍ, ຖ້າຫາກວ່າ... ເກີງຈັ່ງໃດຂ້ອຍກໍຢາກເລີ່ມຕົ້ນຊີວິດດ້ວຍຄວາມບໍລິສຸດມາດົນແລ້ວ. ຖ້າຂ້ອຍຮູ້ຈັກວ່າຫລານຂອງສາດສະດາຈານມິນໂຮຍເຊີຢູ່ນີ້ແລ້ວ, ຂ້ອຍກໍຈະເຂົ້າໄປປະກົດຕົວຢູ່ຕໍ່ຫນ້າລາວຢ່າງເປີດເຜຍ, ເລົ່າໃຫ້ລາວຟັງທຸກຢ່າງ, ແລະຈັ່ງໃດລາວກໍຈະຮັບເອົາໄປເຮັດວຽກນຳ.

- ປະຈຸບັນນີ້, ສາດສະດາຈານ ໂຮນເຊີພວມຢູ່ທີ່ມາຊາດລານ, - ຂ້າພະເຈົ້າຕອບ. - ປະກົດວ່າຕົວເມືອງນັ້ນຢູ່ທະວີບ ໂອດສະຕາລີ...

- ແມ່ນແລ້ວ, ຢູ່ທະວີບ ໂອດສະຕາລີ, ມໍ່ຂົວໂລກໃຕ້, - ວານດິກເວົ້າດ້ວຍສຽງແປກປະຫລາດ. - ເອົາລະ, ລາກ່ອນເດີ, ຂອບໃຈນຳຄວາມເຫັນໃຈຂອງເຈົ້າ. ບາງທີມື້ງນີ້ ຂ້ອຍກໍຈະໄປມາຊາດລານ.

ເຂົາໂດດຂ້າມກຳແພງອອກໄປໂລດ ແລ້ວກໍຫາຍລັບ.

ເວລາອອກມາຈາກຕີນກຳແພງ, ຂ້າພະເຈົ້າຕຳເອົາວັດຖຸອັນໜຶ່ງຈົນເກືອບລົ້ມ. ນັ້ນແມ່ນກົງຈູເດີຍເອີ. ວານດີກລືມສົມບັດທີ່ເຂົາຂີ້ລັກ.

## ຕອນທີຫ້າ

### I

ຕອນເຊົ້າ, ຂ້າພະເຈົ້າໄປຍັງຫ້ອງທົດລອງ ແລະນາງ ລີເຢີໄດ້ທັກທາຍຂຶ້ນວ່າ:

- ປິນ, ສາດສະດາຈານບອກໃຫ້ຂ້ອຍສົ່ງຈົດໝາຍນີ້ໃຫ້ເຈົ້າ, - ນາງເວົ້າຢ່າງຍິ້ມແຍ້ຍແຈ່ມໃສ.

- ຂໍຂອບໃຈ. ຍານາງ ສຸຂະພາບຂອງສາດສະດາຈານເປັນຈັ່ງໃດ? - ຂ້າພະເຈົ້າຖາມ, ທັງຈັບເອົາຈົດໝາຍສະບັບນັ້ນ.

- ຂະນະນີ້, ປະກົດວ່າເພິ່ນແຂງແຮງແດ່ແລ້ວ. ຈັ່ງໃດກໍຕາມ, ເຈົ້າອ່ານເບິ່ງຈົດໝາຍນັ້ນກ່ອນສາ.

ເພິ່ນຂຽນດັ່ງນີ້:

"ປິນ, ເຖິງຈັ່ງໃດຂ້ອຍກໍຍັງມີຄວາມບໍ່ເຕັມໃຈກັບເຈົ້າຢູ່. ມື້ວານນີ້ເຈົ້າກະກຽມນ້ຳກັ່ນຍັງບໍ່ທັນໄດ້ດີ. ໜ້າເສຍດາຍແຕ່ວ່າຂ້ອຍຍັງບໍ່ທັນແຂງແຮງ, ບໍ່ທັນອອກຈາກເຮືອນໄດ້ ແລະບໍ່ທັນໄປຫ້ອງທົດລອງໄດ້ເທື່ອ. ຂະນະນີ້ຫວັງວ່າເຈົ້າຄົງຈະຕອງນ້ຳກັ່ນເຫລົ່ານັ້ນຄືນໃຫ້ໃໝ່. ອີກຢ່າງໜຶ່ງເຈົ້າອ່ານປຶ້ມທີ່ຂ້ອຍສົ່ງໄປໃຫ້ນັ້ນດົນໂພດ. ນັບແຕ່ມື້ນີ້ໄປຈົນຮອດມື້ທີ່ຂ້ອຍຈະສາມາດພົບເຈົ້ານັ້ນ ເຈົ້າຈຳເປັນຈະຕ້ອງເກັບກຳທິດສະດີບໍ່ຫລາຍກໍໜ້ອຍ".

- ຂ້ອຍອຸກໃຈຍ້ອນຈົດໝາຍນີ້, - ຂ້າພະເຈົ້າເວົ້າ, ໃນໃຈຮູ້ສຶກມີຄວາມວຸ້ນວາຍ. - ຂ້ອຍພໍທີ່ຈະສາມາດພົບກັບສາດສະດາຈານໄດ້ບໍ່? ຂ້ອຍຈະເລົ່າໃຫ້ເພິ່ນຟັງເອງ...

- ບໍ່, ບໍ່, - ນາງ ລີເຢີ ຂັດຂຶ້ນ. - ປະຈຸບັນນີ້ບໍ່ຄວນພົບເພິ່ນເທື່ອ. ເຈົ້າຢາກບອກໃຫ້ເພິ່ນຮູ້ກ່ຽວກັບອຸທິຍານຂອງເຈົ້າຫັ້ນດີ? ແລ້ວເພິ່ນຈະຊາບດີທຸກຢ່າງ, ເຈົ້າເຮັດວຽກທຳງານຢູ່ກັບເພິ່ນແບບໃດ...

ຂ້າພະເຈົ້າຮູ້ສຶກວ່າ ນາງອ່ານເນັ້ນຫນັກໃສ່ສຳນວນສຸດທ້າຍນີ້. ຈັກຈັ່ງໃດບຸ, ວິນາທີນັ້ນ, ຮູບພາບດວງຕາຫລອກແຫລກຂອງ ວານດິກ ຈຶ່ງປະກົດຂຶ້ນມາໃນມັນສະຫມອງຂອງຂ້າພະເຈົ້າ ແລະພາບທີ່ມັນໂດດເຂົ້າມາໃນອຸທິຍານຄືນນັ້ນກໍປະກົດຂຶ້ນມາຢ່າງແຈ່ມແຈ້ງ. ຈະຕ້ອງຕັດຂາດການພົວພັນກັບບັກອັບປີນີ້.

- ຂ້ອຍຢາກຮູ້ວ່າເປັນຫຍັງສາດສະດາຈານ ຈຶ່ງຝາກປຶ້ມກ່ຽວກັບ ວິຣຸດໄປໃຫ້ຂ້ອຍ. - ຂ້າພະເຈົ້າເວົ້າເປັນເຊີງຕັ້ງບັນຫາ. - ເພາະສິ່ງເຫລົ່ານັ້ນບໍ່ຄ່ອຍຈະກ່ຽວພັນເຖິງຂ້ອຍເທົ່າໃດ ...

ນາງ ລີເຍີ ຍິ້ມດ້ວຍຄວາມເຫັນໃຈ.

- ເຈົ້າຄິດແບບນັ້ນຊື່ໆ. ງູເວົ້າທົ່ວໄປແລ້ວ ງູກໍມີສ່ວນພົວພັນກັບວິຣຸດເຊັ່ນກັນ. ງູກໍສາມາດເຈັບປ່ວຍໄດ້ເຫມືອນກັນ. ເຈົ້າຄວນຮູ້ເອົາໄວ້ວ່າ ງູສາມາດຕິດໂລກວິຣຸດຊະນິດຮ້າຍແຮງໄດ້ນຳອີກ. ກ້າສັດຢູ່ໃນອຸທິຍານນີ້ຫາກຕາຍໄປແລ້ວ, ກໍຊໍ້າກັບວ່າເປັນຄວາມເສຍຫາຍອັນໃຫຍ່ຫລວງສຳລັບສະຖາບັນຂອງພວກເຮົາ. ຂ້ອຍພຽງແຕ່ສົມມຸດການໄວ້ແບບນັ້ນຊື່ໆດອກ, ແລະຂ້ອຍຄິດວ່າສາດສະດາຈານຄົງຢາກຈະຄົ້ນຄວ້າບັນຫາດັ່ງກ່າວແລະເພິ່ນ ກໍຕ້ອງການຄົນຊ່ວຍວຽກທີ່ເຂົ້າໃຈວຽກນີ້...

- ໂອ, ຄັນຊັ້ນມັນກໍຈະແຈ້ງດີແລ້ວ! - ຂ້າພະເຈົ້າເວົ້າດ້ວຍຄວາມມ່ວນຊື່ນ. - ຂ້ອຍຢາກຈະສະເຫນີຢ່າງຫນຶ່ງກັບຍານາງຄືຂ້ອຍໄດ້ສະຫລຸບຫຍໍ້ເນື້ອໃນຂອງປຶ້ມ . ກະລຸນາຊ່ວຍສົ່ງໄປໃຫ້ສາດສະດາຈານເບິ່ງນຳແດ່, ຢູ່ວິທະຍາໄລເຂົາເຈົ້າສອນພວກເຮົາໃຫ້ເຮັດແບບນີ້: ບໍ່ຄວນອີງອາໃສໃສ່ແຕ່ການຈື່ເອົາຢ່າງດຽວ, ແລະຈະຕ້ອງບັນທຶກເອົາບັນດາຈຸດສຳຄັນຂອງບັນຫາທີ່ຕົນໄດ້ອ່ານນັ້ນນຳອີກ.

ນາງ ລີເຍີ ຈັບເອົາບັນທຶກຂອງຂ້າພະເຈົ້າແລ້ວເປີດເບິ່ງແຕ່ລະຫນ້າ.

ນາງເວົ້າ:

- ແນ່ນອນວ່າຂ້ອຍຈະສົ່ງໃຫ້, ປຶ້ມບັນທຶກຂອງເຈົ້າຈະເຮັດໃຫ້ສາດສະດາຈານມີຄວາມພູມໃຈຢ່າງຍິ່ງ. ເພິ່ນປະພຶດດີຕໍ່ເຈົ້າສະເຫມີ.

ນາງອ່ານຕອນຫນຶ່ງຢູ່ໃນບັນທຶກຂອງຂ້າພະເຈົ້າດ້ວຍສຽງດັງໆ:

- "ວິຣຸດ ຄືຕົວແທນຂອງພະຍາດບາດເຍົາແລະຄວາມຕາຍ. ພວກມັນບຸກໂຈມຕີເຂົ້າສູ່

ສິ່ງທີ່ມີຊີວິດທຸກຢ່າງ, ນັບແຕ່ຈຸລິນຊີຈົນເຖິງມະນຸດ" - ກຶກຕ້ອງ. - ນາງ ລີເຢີເວົ້າ, - ກະທັ້ງຈຸລິນຊີກໍຍັງກຶກພວກມັນຂົ່ມເຫັງ. ວີຣຸດ ສາມາດດັບສູນຈຸລິນຊີ. ຍ້ອນວ່າຂະໜາດຕົວຂອງວີຣຸດມັນນ້ອຍທີ່ສຸດ. ນ້ອຍກວ່າຫລາຍກ້າທຽບກັບແມ່ພະຍາດ. ການຄົ້ນຄ້ວາວີຣຸດມີຄວາມສຳຄັນຢ່າງໃຫຍ່ຫລວງທີ່ສຸດ. ເພາະການແກ້ໄຂບັນດາບັນຫາພື້ນຖານຂອງຊີວະວິທະຍາ - ກ່ຽວກັບແຫລ່ງກຳເນີດແຫ່ງຊີວິດ, ກ່ຽວກັບຂີດແດນລະຫວ່າງຊີວິດແລະຄວາມຕາຍ ທຳມະຊາດ ມີການພົວພັນຢ່າງສະນິດແໜ້ນກັບພວກມັນ.

- ແຕ່ຖ້າເຂົາເຈົ້າຄົ້ນພົບວ່າວີຣຸດບໍ່ແມ່ນສິ່ງທີ່ມີຊີວິດເດລະ? - ຂ້າພະເຈົ້າຖາມເພາະຢາກຮູ້ລາຍລະອຽດກ່ຽວກັບຊີວະວິທະຍາ.

- ຖ້າວີຣຸດຫາກເປັນທາດກາຍຍະອິນຊີແລ້ວ, ບໍ່ໄວກໍຊ້າ, ວິທະຍາສາດຈະຕ້ອງສ້າງມັນຂຶ້ນມາໄດ້ຢູ່ໃນຫ້ອງທົດລອງ, ຫລັງຈາກນັ້ນກໍຈະປະດິດທັງຢາຕ່າງໆເພື່ອຕ້ານມັນອີກ...

- ຊັ້ນຫວະ... - ຂ້າພະເຈົ້າພຶມພຳຂຶ້ນດ້ວຍຄວາມແປກໃຈເປັນຢ່າງຍິ່ງ.

- ແມ່ນ, ແມ່ນແລ້ວ, - ນາງ ລີເຢີກຶກຫົວ. - ດຽວນີ້ພວກເຮົາສາມາດລົມກັນໄປນຳທັງເຮັດວຽກໄປນຳ. ເຈົ້າຊ່ວຍກະກຽມນ້ຳກັ່ນ ກາລີແປັກມັງການັດໃຫ້ແດ່ເດີ...

ຂ້າພະເຈົ້າເລີ່ມປຸງນ້ຳກັ່ນ. ນາງ ລີເຢີເວົ້າຕໍ່ວ່າ:

- ບົນ, ເຈົ້າລອງຄິດເບິ່ງດູວ່າ, ຈະມີເລື່ອງຫຍັງເກີດຂຶ້ນພາຍຫລັງທີ່ມີວີຣຸດທຽມ. ຖ້າເຄມີສາດລວບລວມວີຣຸດໜຶ່ງຂຶ້ນມາໄດ້ໃນຫລອດແກ້ວກໍໝາຍຄວາມວ່າມະນຸດໄດ້ສ້າງສິ່ງທີ່ມີຊີວິດທຽມຢ່າງໜຶ່ງຂຶ້ນມາໄດ້ແລ້ວ ພວກເຮົາຈະກ້າວໄປເຖິງການແກ້ໄຂບັນຫາກ່ຽວກັບແຫລ່ງກຳເນີດຂອງຊີວິດໄດ້ຢ່າງແທດເໝາະທີ່ສຸດ. ເຈົ້າເຂົ້າໃຈດີ, ບົນ?

- ໂອ້, ຍານາງ ລີເຢີ, - ຂ້າພະເຈົ້າເວົ້າ. - ສິ່ງຕ່າງໆເຫລົ່ານັ້ນຈັ່ງແມ່ນເປັນຫນ້າຈັບອົກຈັບໃຈ! ຂ້ອຍຈະບໍ່ຫ່າງເຫີນຈາກສາດສະດາຈານແລະຍານາງໄປທາງໃດເລີຍ.

ເຈົ້າຄຶດຈັ່ງຊັ້ນຫວະ, ບົນ? - ນາງ ລີເຢີ ເວົ້າສຽງເຢັ້ນອອກໄປດ້ວຍທ່າທາງແປກໃຈ. - ດີຫລາຍ. ບັນຫາຂອງມັນມີຢູ່ວ່າເຈົ້າຄວນເອົາໃຈໃສ່ອີກຕື່ມຈັກໜ້ອຍ. ເບິ່ງຫັ້ນ, ເຈົ້າກອກນ້ຳກັ່ນອອກນອກກະຊວຍແລ້ວເດຫັ້ນ.

## II

ຫລັງຈາກສຸມອົກສຸມໃຈເຮັດວຽກຢູ່ໃນຫ້ອງທົດລອງເປັນເວລາສາມຊົ່ວໂມງແລ້ວ, ຂ້າພະເຈົ້າກໍກັບເມືອພັກຜ່ອນຢູ່ເຮືອນດ້ວຍອາລົມອັນສົດຊື່ນແຈ່ມໃສທີ່ສຸດ. ຄວາມຫວັງທີ່ສົດສວຍງົດງາມຕ່າງໆໄດ້ກຸມກ້ອມທົ່ວທັງວິນຍານຂອງຂ້າພະເຈົ້າ. ແມ່ນແລ້ວ, ຈະຕ້ອງຮ່ຳຮວຍນຳສາດສະດາຈານ, ໃນບໍ່ຊ້ານີ້ເພິ່ນກໍຈະຊັກຈູງເອົາຂ້າພະເຈົ້າໄປເປັນຄົນຮູ້ຜູ້ດີກວ່າ ກລິບ ຫລື ເວີນເຊີນຕັ້ງສິບທົບພຸ້ນແຫລະ. ໃນທີ່ສຸດ, ຫລັງຈາກຄົນຢ່າງ ເຣລີ, ໂປນລິກ ແລະ ອີ່ດາຄາຜູ້ເຄາະຮ້າຍນັ້ນແລ້ວ, ຂ້າພະເຈົ້າກໍໄດ້ພົບກັບມະນຸດແທ້ຈິງຜູ້ຫນຶ່ງ. ຫລັງຈາກນີ້ແລ້ວ... ກໍຈະສາມາດຂຽນຈົດຫມາຍເອີ້ນ ເອດີເພື່ອເຊີນນາງມາພໍ້ແລ້ວຄາວນັ້ນ...

ຢູ່ແຫ່ງນີ້ບໍ່ມີລັດສະຫມີຍານອັດສະດົງ. ຕາເວັນຕົກຢູ່ດ້ານຫລັງຂອງປ່າດົງວົງກົດແລ້ວ ຄວາມມືດຂອງລາຕີການກໍກຸມອົບເຂົ້າມາໂລດ. ມື້ນີ້ຂ້າພະເຈົ້າມີເຫດຜົນພຽງພໍເພື່ອລໍຖ້າວານດິກ. ດຶກດອນກາງຄືນຈັ່ງໃດເຂົາກໍຕ້ອງຫມັ້ນຫົວມາ ຖ້າບໍ່ແມ່ນມາຈັບງູ ເດີຍເອີ ກໍຕ້ອງມານຳເອົາກົງຂອງເຂົາ. ທ້ອງຫິວແລ້ວ ຫົວເຂົ່າຕ້ອງຄານ, ຍິ່ງໄປກວ່ານັ້ນ ວານດິກຍັງມີອຸບາຍຈະຫາກິນດ້ວຍງູພິດຊະນິດໃຫມ່ອີກດ້ວຍ. ດັ່ງນັ້ນ ຂ້າພະເຈົ້າຈະຕ້ອງພະຍາຍາມເຮັດທຸກສິ່ງທຸກຢ່າງເພື່ອໃຫ້ການມາຢ້ຽມຍາມເທື່ອນີ້ກາຍເປັນເທື່ອສຸດທ້າຍ, ຈະຕ້ອງສະແດງຄວາມເຢັນຊາ, ເຄັ່ງຄັດອອກມາແລະຍິ່ງໄປກວ່ານັ້ນ ກໍຈະຕ້ອງຂູ່ເຂົາຕື່ມອີກ.

ຂ້າພະເຈົ້າຕວງໄວ້ບໍ່ຜິດ, ຕາມປົກກະຕິແລ້ວດຶກດອນຂອນຄືນ, ເມື່ອດວງເດືອນເລີ່ມລັບລ່ຽມລົງໄປ, ວານດິກຈະບິນຂ້າມກຳແພງເຂົ້າມາ ແລະຕົກຢູ່ໃນເງື້ອມມືຂອງຂ້າພະເຈົ້າ.

- ວານດິກ, ນີ້ກົງຂອງເຈົ້າ, -ຂ້າພະເຈົ້າເວົ້າຢ່າງເຄັ່ງຂຶມ. - ໃນນັ້ນມີງູເດີຍເອີໂຕດຶງເປັນໂຫລງ ພວກງູມື້ວານນີ້ ຂ້ອຍປ່ອຍມັນໄປຫມົດແລ້ວ - ເຈົ້າເລືອກງູບໍ່ເກັ່ງ. ແລ້ວກໍ ... ຫນີໄປໃຫ້ພົ້ນສາຍຕາ!

- ຈັ່ງໃດມື້ນີ້ເຈົ້າຈຶ່ງປານກັບປິ້ງກຶກປູນເອົາໂລດ, ບິນ? - ວານດິກ ຖາມເຍີ້ຍ, ທັງປາກສູບກອກ. - ແລ້ວເປັນຫຍັງເຈົ້າຈຶ່ງຄິດວ່າຂະນະນີ້ຂ້ອຍພວມສົນໃຈກັບງູເດີຍເອີຢູ່? ບໍ່ແມ່ນແນວນັ້ນອີກແລ້ວ ບິນເອີຍ, ສາມມື້ມານີ້ຂ້ອຍໄປໄຫວ້ພະຟັງທຳຢູ່ໂບດໃຫຍ່ ຮັງກູນແລະໄດ້ຟັງບາດຫລວງເພິ່ນເທດສະຫນາທຳ. ເພິ່ນຕັ້ງໃຈສັ່ງສອນຂ້ອຍໃຫ້ກັບຄືນສູ່ຫົນທາງຢູ່ໃນສິນ

ກິນໃນທຳ. ບິນ, ຂ້ອຍຢາກກາຍເປັນຄົນຜູ້ບໍລິສຸດພຸດຜ່ອງນຳເພິ່ນ. ຂີ້ລັກມັນເປັນບາບເປັນກຳອັນໃຫຍ່ຫລວງທີ່ສຸດ. ແລະແນ່ນອນຈະຕ້ອງກັບຕົວກັບໃຈ. ບໍ່ຊັ້ນຂ້ອຍຈະຕາຍ.

- ໃຜຫ້າມບໍ່ໃຫ້ເຈົ້າກັບຕົວກັບໃຈລະ? - ຂ້າພະເຈົ້າເບະສົບຫົວເຍີ້ຍ. - ເອີນີ, ຢ່າຊິຮ້ອງໂຮຂຶ້ນແບບນັ້ນ. ສາດສະດາຈານຈະໄດ້ຍິນ.

ວານດິກຮໍ່າຍາບາດແຮງໆໄຟຢູ່ໃນ ກອກຣຸ່ງແດງຂຶ້ນຈົນວ່າແນມເຫັນດັງຂອງມັນໄດ້ຊັດ.

- ກໍຍິ່ງດີ, ຂ້ອຍພວມຕ້ອງການພົບກັບທ່ານ ມົນໂຣຍເຊີ. ຂ້ອຍຈະຫລັ່ງນ້ຳຕາແຫ່ງຄວາມກິນແໜງລົງຕໍ່ຫນ້າເພິ່ນແລະຂໍອະໄພຈາກເພິ່ນ. ບໍ່ດັ່ງນັ້ນຂ້ອຍຈະບໍ່ໄດ້ຂຶ້ນສະຫວັນ...

- ວານດິກ, ເຈົ້າເມົາຫວະ?

- ຜິດໃຫຍ່ແລ້ວບິນ, ໃນຊີວິດຂອງຂ້ອຍ, ຂ້ອຍບໍ່ເຄີຍມີສະຕິດີຄືດງວນີ້ຈັກເທື່ອ. ບິນ, ຈົ່ງພາຂ້ອຍໄປຫາສາດສະດາຈານ!

- ເຈົ້າບ້າແລ້ວຫວະ!

- ເອົາລະ, ຈັ່ງຊັ້ນກໍຢ່າສາ, ຂໍພຽງແຕ່ເຈົ້າພາຂ້ອຍໄປຂ້າງປະຕູປ່ອງຢ້ຽມຫ້ອງເຮັດວຽກຂອງສາດສະດາຈານ, ແລ້ວຂ້ອຍກໍຈະແນມເບິ່ງເພິ່ນຜ່ານຜ້າກັ້ງທີ່ຮຸ່ງຢູ່ນັ້ນກໍພໍ. ຂ້ອຍຢາກເຫັນ, ເຖິງແມ່ນວ່າຈະເປັນພຽງແຕ່ເງົາຂອງສາດສະດາຈານທີ່ຫນ້າເຄົາລົບນັບຖືຄົນນັ້ນກໍຕາມ. ເລື່ອງນີ້ຈະເສີມພະລັງໃຫ້ຂ້ອຍໃນການກັບຕົວຈາກຄວາມຊົ່ວມາສູ່ຄວາມດີ. ຂ້ອຍອາດຈະເຮັດວຽກນີ້ຢ່າງບໍ່ຈຳເປັນໃຫ້ເຈົ້າຊິດຊ່ວຍ, ບັນຫາຂອງມັນມີຢູ່ວ່າຂ້ອຍຫາທາງອະທິບາຍໄດ້ຍາກກັບພວກຊາວຈີນທີ່ຍ່າງເວນຍາມໄປໆມາໆຢູ່ໃນເດີ່ນນັ້ນ.

ຊາຍຂີ້ໂທດສາມານຄົນນັ້ນເຮັດໃຫ້ຂ້າພະເຈົ້າໂມໂຫຈົນທົນຕໍ່ໄປບໍ່ໄດ້ອີກ.

- ຫນີໄປໄກໆໃດ, ວານດິກ!

ວານດິກເຂາະຂີ້ຢາອອກຈາກ ກອກຢ່າງງຽບໆແລະກົ້ວຂຶ້ນຄ່ອຍໆ.

- ໄດ້ແລ້ວ, ບັກສ່ຽວ! ມື້ອື່ນຂ້ອຍອາດຈະສົ່ງຂ່າວໃຫ້ທ່ານ ມົນໂຣຍເຊີ ຮູ້ວ່າ, ເຈົ້າໄດ້ຫລອກລວງເພິ່ນຄືແນວໃດ!

- ແມ່ນແລ້ວ, ເພາະເຈົ້າໄດ້ຊ່ວຍຂ້ອຍລັກງູຢູ່ໃນອຸທິຍານນີ້. ເພິ່ນຈະຍົກໂທດໃຫ້ອົບຍານທີ່ຫລົງຜິດຫລົງພາດຂອງຜູ້ຕ້ອງໂທດ, ແຕ່ຈະບໍ່ອະໄພໃຫ້ຊາຍຫນຸ່ມຜູ້ເນລະຄຸນຕໍ່ເພິ່ນ

ເຊິ່ງເພິ່ນເຄີຍໄວ້ວາງໃຈມາແລ້ວ. ຈຶ່ງເລືອກເອົາສາ: ເຈົ້າຊິບອກໃຫ້ຂ້ອຍຮູ້ຈັກປະຕູປ່ອງຢ້ຽມຫ້ອງເຮັດວຽກຂອງສາດສະດາຈານ, ຫລືວ່າ ມື້ອື່ນຈະປ່ອຍໃຫ້ສາດສະດາຈານຈະຮູ້ຄວາມເປັນໄປທຸກຢ່າງ.

- ວານດິກ, ເຈົ້າມັນແມ່ນພີສາດໂຕຫນຶ່ງ, - ຂ້າພະເຈົ້າເວົ້າຫລັງຈາກທີ່ຄຶດຄົ້ນກ່ຽວກັບສະພາບການຂອງຕົນຢູ່ຢ່າງງຽບໆຢູ່ຊົ່ວໄລຍະຫນຶ່ງ. - ເອົາລະ, ຂ້ອຍຈະພາເຈົ້າໄປຂ້າງປະຕູປ່ອງຢ້ຽມ, ແຕ່ດ້ວຍເງື່ອນໄຂທີ່ວ່າເຈົ້າບໍ່ຕ້ອງມາສະຖາບັນນີ້ອີກຈັກເທື່ອ.

ວານດິກ ດີກລີ້ງດ້ວຍການຫັນໃຈໃຫຍ່. ມັນສິກກິ້ງຂຶ້ນບ່າ ແລ້ວຍ່າງນຳຂ້າພະເຈົ້າໄປ. ຂ້າພະເຈົ້າໄຂປະຕູສວນທີ່ຢູ່ຂ້າງນັ້ນ, ພວກເຮົາຍ່າງເຂົ້າໄປໃນເດີ່ນ. ຢູ່ໃນສະຖາບັນງູ ໃຜໆກໍນອນຫລັບດົນແລ້ວ, ມີແຕ່ປະຕູປ່ອງຢ້ຽມຫ້ອງເຮັດວຽກຂອງສາດສະດາຈານເທົ່ານັ້ນທີ່ຍັງຮຸ່ງຢູ່. ທ່ານ ມິນໂຮຍເຊີ ນັ່ງອ່ານຫນັງສືຢູ່ກັບໂຕະ, ພວກເຮົາແນມເຫັນເງົາຂອງເພິ່ນຢູ່ທີ່ຜ້າກັ້ງ.

- ເອົາລະຫນີໄປໃຫ້ພົ້ນສາຍຕາສາ, - ຂ້າພະເຈົ້າຊິ່ມໃສ່ມັນ.

ແຕ່ ມັນຊ່າງເປັນຫນ້າຍານກົວເຫລືອທີ່ຈະພັນລະນາ, ວານດິກກົ້ມກິ້ງງູລີ້ງດິນ ດ້ວຍຈ້າງຫວະຄ່ອຍເບົາ ແລະວ່ອງໄວປານເສືອດາວ, ມັນປີນຂຶ້ນເທິງຮາວພະນັກຊັ້ນເທິງ ໄຂປະຕູປ່ອງຢ້ຽມແລະກະຊາກຜ້າກັ້ງອອກ. ພໍແຕ່ແນມເບິ່ງປະຕູປ່ອງຢ້ຽມ ຂ້າພະເຈົ້າກໍຕ້ອງຫລີງແຜດສຽງຂຶ້ນ.

ຢູ່ໃນຫ້ອງບໍ່ມີໃຜເລີຍ. ຢູ່ເທິງໂຕະມີຫຸ່ນຮູບຄົນໂຕຫນຶ່ງທີ່ເຮັດດ້ວຍເຟືອງເຊິ່ງກ່ອນນີ້ຂ້າພະເຈົ້າເຄີຍຫລົງຄຶດວ່າເປັນສາດສະດາຈານ ມິນໂຮຍເຊີ ນັ້ນພວມເຫນັງຕີງຢູ່. ໂຄມນ້ອຍດວງຫນຶ່ງທີ່ຕິດລະບົບສະທ້ອນແສງສ່ອງໃສ່ເບື້ອງຫລັງຂອງຫຸ່ນຄົນໂຕນັ້ນ.

ວານດິກຫົວ:

- ບັດນີ້ເຈົ້າຊິວ່າຈັ່ງໃດ?

ແຕ່ຂະນະດຽວກັນນັ້ນ ສຽງປືນນັດຫນຶ່ງກໍໄດ້ດັງລັ່ນຂຶ້ນ. ກະສຸນຕຳປິວະໃສ່ວົງກົບປະຕູປ່ອງຢ້ຽມ. ວານດິກ ໂດດລົງດິນ ແຕ່ມັນກໍຖືກລູງໂຫຊັດຫງາຍຫລັງລົງກ່ອນທີ່ຈະຫັນປົບຫນີໄປໄດ້. ພວກຄົນຈີນກີໄພສາຍແລ່ນມາແຕ່ເຮືອນຂອງຕົນ.

- ໃນກໍລະນີນີ້ຈະຕ້ານຄືນກໍໄຮ້ປະໂຫຍດ, - ວານດີກນອນຢຽດຢູ່ກັບພື້ນດິນແລະເວົ້າອອກມາວ່າ: - ຈົ່ງບອກເຂົາເຈົ້າປ່ອຍ ຂ້ອຍ. ທຸກສິ່ງທຸກຢ່າງມັນເປັນເລື່ອງເຂົ້າໃຈຜິດກັນຊື່ງດອກ...

ນາງ ລີເຢີ ຢືນຢູ່ຕໍ່ໜ້າຂອງຂ້າພະເຈົ້າ. ຂ້າພະເຈົ້າບໍ່ເຄີຍຄິດມາກ່ອນເລີຍວ່ານາງຈະໂຫດຫ້ຽມໄດ້ເຖິງພຽງນັ້ນ. ທ່ວທັງຄີງຂອງນາງສັ່ນຂຶ້ນຍ້ອນໂມໂຫ, ຄຳເວົ້າຕ່າງໆຂອງນາງກອກເຫລີງໃສ່ຫົວຂອງຂ້າພະເຈົ້າ, ສຽບຂາດແລະຊັດເຈນ:

- ປີນ, ເຈົ້າຕັ້ງແມ່ນນົກສອງຫົວງົວເຂົາຄອນອີ່ຫລີນີ້! ພວກເຮົາອ່ານອອກແຕ່ດົນແລ້ວ...

"ສາດສະດາຈານງູ" ແລະຜູ້ຊ່ວຍວຽກຂອງເພິ່ນຍ່ອມສະຫລາດຫລັກແຫລມກ່ວາ ວານດີກຫລາຍ.

- ພວກເຮົາໄດ້ຕິດຕາໃສ່ຫາງໆ ເດີຍີເຣີ ທີ່ຊື້ມາຈາກປະຊາຊົນໃນທ້ອງຖິ່ນ. ຮາ-ຮ່າ! ວາງແຜນເກັ່ງຢູ່ໃດເນາະ! ຂາຍ, ລັກແລ້ວຂາຍອີກ... ໃຜໆກໍເຫັນເຈົ້າກັບຫມໍຂີ້ລັກນີ້ເລັດລອດເຂົ້າມາໃນເດີ່ນແລະຍັງໂອ້ລົມສົນທະນາກັບມັນອີກ... ມີກົງອີກພຸ້ນນະ!

- ຍານາງຈົ່ງໃຫ້ ອະໄພແກ່ຂ້ອຍແດ່ທ້ອນ - ຍານາງ ລີເຢີ... - ຂ້າພະເຈົ້າເວົ້າ, ແຕ່ນາງລີເຢີ ບໍ່ປະໂອກາດໃຫ້ຂ້າພະເຈົ້າເວົ້າຕໍ່ໄປອີກ.

- ສາດສະດາຈານຮູ້ແຈ້ງເຖິງຄວາມບໍ່ຊື່ສັດຂອງເຈົ້າມາດົນແລ້ວ. ເພິ່ນຮູ້ດີວ່າ ຄົນທ້ອງຖິ່ນທີ່ຖືກເຂົາຜູ້ນີ້ຊື້ຈ້າງໄດ້ເອົາງູ ເດີຍີເຣີ ທີ່ເຂົາລັກມາຂາຍໃຫ້ເພິ່ນເອງ. ອີກຢ່າງ ຖ້າບໍ່ມີການຮ່ວມມືຂອງເຈົ້າແລ້ວ, ຫມໍຂີ້ລັກນີ້ກໍບໍ່ສາມາດຈະຈັບງູໄດ້ດອກ.

- ຂໍຍານາງຈົ່ງຟັງຂ້ອຍເວົ້າໃຫ້ຫມົດກ່ອນ...

- ເຈົ້າຫາລະມິດຢູ່ດີກ່ວາ, ຄົນຕ່ຳຊ້າ! ສາດສະດາຈານ ບໍ່ອາດຈະທົນຕໍ່ຄວາມຊົ່ວຊ້າອັບປີຂອງຄົນຜູ້ທີ່ເພິ່ນໄດ້ກູ້ຊີວິດເຂົາໃຫ້ພົ້ນຈາກພະຍາດກາລະໂລກນັ້ນດອກ. ເພິ່ນຈະທໍລະມານໃຈສ່ຳໃດ ເມື່ອໄດ້ເຫັນພຶດຕິກຳອັນອັບອາຍຂາຍໜ້າຂອງເຈົ້າໃນມື້ນີ້. ເພິ່ນຫລີງເຫັນໄວ້ກ່ອນແລ້ວວ່າພວກຂ້ອຍທຸກຄົນຈະເປີດໜ້າກາກເຈົ້າ, ແລະເພິ່ນກໍອອກໄປພ້ອມກັບສາດສະດາຈານໂຮນເຊີ ແລ້ວ...

ຂ້າພະເຈົ້າພະຍາຍາມປົກປ້ອງຕົນເອງ, ແຕ່ກໍໄຮ້ປະໂຫຍດ.

-ຍານາງ ລິເຍີ ທີ່ນັບຖື, ຂໍຈົ່ງອະນຸຍາດໃຫ້ຂ້ອຍຊີ້ແຈງແດ່ເທາະ, -ວານດິກ ເວົ້າຢ່າງສຸພາບ. ພວກຄົນຈີນພວມຈັບກຸມຄົນຂີ້ລັກຜູ້ນີ້ໄວ້ແໜ້ນໆ. ມືທັງສອງກໍ່ຂອງເຂົາຖືກຜູກໄວ້. -ນາງຜູກໂທດຊາຍໜຸ່ມຄົນນີ້ ໂດຍທີ່ລາວບໍ່ໄດ້ກະທຳນັ້ນ. ມັນເປັນເລື່ອງອະຍຸດຕິທຳ. ຕາມຂ້າພະເຈົ້າຮູ້ ລາວບໍ່ມີໂທດຫຍັງ. ພຽງແຕ່ວ່າຂ້ອຍຫລົງທາງໃນຕອນກາງຄືນ, ແນມເຫັນແສງໄຟເລີຍເຂົ້າມານີ້ຊື່ໆດອກ. ມີໃຜຜູ້ໜຶ່ງຮ້ອງມາໃສ່ຂ້ອຍຈາກເບື້ອງໃນຂອງປະຕູປ່ອງຢ້ຽມ. ຂ້ອຍຄຶດວ່າພວກໝາພວມໄລ່ຂ້ອຍຢູ່ໃນເດີ່ນ. ຍ້ອນຢ້ານໂພດ, ຂ້ອຍເລີຍໂດດຂຶ້ນຮາວພະນັກຢູ່ເທິງປ່ອງຢ້ຽມ. ແຕ່ຊາຍໜຸ່ມຜູ້ນີ້ໄດ້ປະກົດຕົວແລະຮ້ອງລັ່ນຂຶ້ນ, ປະກົດວ່າລາວເອງເປັນຜູ້ຍິງຂ້ອຍ... ຫລັງຈາກນັ້ນຄົນພວກນີ້ກໍ... ຂ້ອຍເປັນໂລກຫົວໃຈວາຍ... ຄວາມຕົກໃຈຈະທຳລາຍສຸຂະພາບຂອງຂ້ອຍ. ຈົ່ງແກ້ເຊືອກຈາກມືຂອງຂ້ອຍອອກກ່ອນ, ໃຫ້ຕາຍແມ້, ຂ້ອຍບໍ່ເຄີຍຄຶດວ່າຈີປົບໜີດອກ...

-ເຈົ້າຂີ້ຕົວະ! -ນາງ ລິເຍີ ແຜດສຽງຂຶ້ນຢ່າງປ່ວງບ້າ. -ເຈົ້າແມ່ນໃຜເດິກດື່ນຄ່ຳຄືນປານນີ້ກໍຍັງຫລອຍເຂົ້າມາໃນສະຖາບັນຄົ້ນຄວ້າຂອງສາດສະດາຈານ ມົນໂຮຍເຊີ? ແມ່ນແລ້ວ, ຈະຕ້ອງລ້ຽງໝາແລະພວກເຮົາທຸກຄົນຈະຕ້ອງປະກອບອາວຸດ. ກະທັ້ງໃນເຮືອນສ່ວນຕົວແທ້ໆ ພວກເຮົາກໍຍັງບໍ່ໄດ້ຢູ່ເປັນສຸກ... ໃນຖົງຂອງເຈົ້າຫັ້ນແມ່ນຫຍັງ? ງຸ ເດີຍເຣີ ແມ່ນບໍ່?

-ນາງເອີຍ, ຢ່າແຕະຕ້ອງຖົງນັ້ນ! ນັ້ນຄືສົມບັດທີ່ເປັນກຳມະສິດຂອງຂ້ອຍ. ຢູ່ໃນຫັ້ນບໍ່ມີງຸເດີຍເຣີ ຂອງພວກທ່ານດອກ. ແລ້ວກໍຢ່າຫວັງຈີໄຂຖົງຂ້ອຍອອກໄດ້. ລະບົບກະແຈຂອງມັນສະລັບສັບສົນທີ່ສຸດ. ແຕ່ຖ້າພວກທ່ານຫາກແຫກຖົງນັ້ນອອກແລ້ວ ຂ້ອຍຈະຕ້ອງບັງຄັບໃຫ້ພວກທ່ານຕ້ອງຮັບຜິດຊອບກ່ຽວກັບການກໍ່ຄວາມເສຍຫາຍຕໍ່ສົມບັດສ່ວນຕົວແລະ ຈະຟ້ອງພວກທ່ານ, ຖ້າຫາກຂ້ອຍເຫັນວ່າເງິນຫ້າສິບສອງຫລຽນຄຳຂອງຂ້ອຍຢູ່ໃນນັ້ນບໍ່ຄົບຕາມຈຳນວນ...

ວານດິກ ເວົ້າຢ່າງເຢືອກເຢັນແລະມີເຫດຜົນ ນາງ ລິເຍີ ຈຶ່ງສັ່ງແກ້ເຊືອກໃຫ້ມັນ.

-ດຽວນີ້ ເຈົ້າຈົ່ງໄຂຖົງອອກດ້ວຍມືເຈົ້າເອງ.

-ບໍ່, ຍານາງ, -ວານດິກ ໂນ້ມຕົວຄຳນັບ. -ຍານາງໄດ້ຜູກໂທດຂ້ອຍໄປແລ້ວ. ຂ້ອຍ

ຕຽມພ້ອມແລ້ວທີ່ຈະໄປໃຫ້ການຢູ່ທີ່ສານ. ນະທີ່ນັ້ນຂ້ອຍຈະຢັ້ງຢືນວ່າຕົນເປັນຜູ້ບໍ່ມີໂທດ ... ຍານາງຈະມີຄຳສັ່ງໃຫ້ຂ້ອຍຄ້າງຄືນຢູ່ບ່ອນໃດລະ ?

## III

ພໍຮຸ່ງເຊົ້າ, ລຸງໂທກໍບໍລິຫົວເຂົ້າມາໃນເຮືອນ, ບ່ອນເຊິ່ງຂ້າພະເຈົ້າພວມນອນຫລັບມ້ຽງຢູ່ເທິງເປ.

- ເຂົາເຈົ້າຈະສົ່ງພວກເຈົ້າໄປຮັງກູນຫມົດທັງສອງຄົນ. ຊາວຈີນຜູ້ນັ້ນເວົ້າແບບໄວໆແລະຊຸບຊິບ. - ລຸງຫລີພວມຈັດແຈງລົດໂອໂຕຢູ່. ສາລະວັດຢູ່ປົດປະຈຳທ້ອງຖິ່ນນີ້ໃກ້ຈະມາຮອດແລ້ວ. ເຂົາຈະສົ່ງພວກເຈົ້າຂຶ້ນສານ. ຈົ່ງຂຶ້ນໄປຂໍຂະມາກັບນາງ ລີເຍີ. ເມື່ອສາດສະດາຈານກັບມານາງຈະເວົ້າຊ່ວຍ. ສ່ວນບັກໂຈນນັ້ນກໍຍັງບໍ່ຍອມພົກຈາກກົງຂອງມັນຢູ່ ...

- ລຸງໂທເອີຍ, ຂ້ອຍບໍ່ມີໂທດຫຍັງຫມົດ, - ຂ້າພະເຈົ້າຕອບລຸງໂທສັ້ນໆ.

ຫ້ານາທີຕໍ່ມາ, ຂ້າພະເຈົ້າກໍໄດ້ເຂົ້າໄປເຄາະປະຕູຫ້ອງທົດລອງ. ນາງ ລີເຍີ ນັ່ງຢູ່ຂ້າງໂຕະ, ຢູ່ອ້ອມຂ້າງເຕັມແຕ່ຫລອດແກ້ວ.

- ຍານາງລີເຍີ, - ຂ້າພະເຈົ້າເວົ້າ, - ຈົ່ງອະໄພໃຫ້ຂ້ອຍດ້ວຍ.

ນາງແນມເບິ່ງຂ້າພະເຈົ້າ, ປານກັບວ່າຂ້າພະເຈົ້າຖືກປັ້ນຂຶ້ນມາດ້ວຍແກ້ວບໍລິສຸດເອົາໂລດ. ອີກຄາວຫນຶ່ງນາງກໍຫັນຫນ້າອອກໄປ, ບໍ່ແນມເບິ່ງຂ້າພະເຈົ້າອີກ.

- ເຈົ້າບໍ່ເຫັນຫວະ, ຂ້ອຍພວມຫຍຸ້ງ.

ນາງແນມເບິ່ງແກ້ວຄໍກິ່ວ.

- ຂ້ອຍຂໍປະຕິຍານວ່າຈະທວງເອົາສິ່ງທີ່ບັກໂຈນໄດ້ລັກເອົາໄປນັ້ນຄືນມາທຸກຢ່າງ, - ຂ້າພະເຈົ້າເວົ້າຢ່າງອັບອົ້ງແລະຂາດຄວາມແນ່ໃຈຍ້ອນທ່າທີການຕ້ອນຮັບຢ່າງເຢັນຊາຂອງນາງ.

ນາງ ລີເຍີ ບໍ່ຕອບແລະພວມສົນໃຈນຳແຕ່ຫລອດແກ້ວເຄື່ອງທົດລອງເຫລົ່ານັ້ນຢູ່. ປະມານຫ້ານາທີຕໍ່ມາ, ໂດຍບໍ່ແນມເບິ່ງຂ້າພະເຈົ້າ, ນາງເວົ້າຂຶ້ນວ່າ:

- ເຈົ້າຍັງຢູ່ນີ້ຫວະ? ຈົ່ງເອົາພວງກະແຈປະຕູສວນອຸທິຍານແລະພວງກະແຈຄອກສັດມານີ້ແລ້ວກັບໄປລໍຖ້າຕຳຫລວດ.

- ນາງໄລ່ຂ້ອຍຫວະ ?

- ສາດສະດາຈານ ບໍ່ຢາກເຫັນເຈົ້າອີກແລ້ວ. ເພິ່ນຈະບໍ່ອະໄພໃຫ້ເຈົ້າດອກ.

ນາງ ລີເຢີແນມເບິ່ງຂ້າພະເຈົ້າດ້ວຍຄວາມຈິດຈໍ່ຢູ່ຄາວຫນຶ່ງດັ່ງທີ່ນາງເຄີຍແນມເບິ່ງຂ້າພະເຈົ້າໃນໂມງຮຽນຢູ່ສວນອຸທິຍານໃນເມື່ອກ່ອນນີ້.

- ຂ້ອຍເອງກໍອະໄພໃຫ້ເຈົ້າບໍ່ໄດ້, - ນາງເວົ້າດ້ວຍນ້ຳສຽງເຈັບຊ້ຳ.

- ຂ້ອຍມີໂທດ, ແຕ່ບໍ່ໄດ້ເປັນດັ່ງທີ່ນາງຄຶດ! - ຂ້າພະເຈົ້າເວົ້າຂຶ້ນຢ່າງຫມົດຫວັງ.

ພະຍາຍາມເຮັດໃຫ້ນ້ຳສຽງທຸ່ນທ່ຽງທີ່ສຸດ, ຂ້າພະເຈົ້າເລົ່າຄືນເກືອງເລື່ອງທີ່ຕົນໄດ້ຈັບຕົວວານດິກແລະມີຄວາມອຶດູສິງສານມັນຄືແນວໃດສູ່ນາງຟັງ. ແຕ່ນາງລີເຢີ ກໍຍັງຄົງແກວ່ງຫົວຢ່າງເມີນເສີຍ.

- ເກືອງຈັ່ງໃດ ຂ້ອຍກໍບໍ່ສາມາດຈະອະໄພໃຫ້ເຈົ້າໄດ້. ກ່ອນນີ້, ຂ້ອຍເຄີຍຖືເຈົ້າເປັນຄົນຢູ່ໃນວົງການຂອງພວກຂ້ອຍ, ເຈົ້າເຂົ້າໃຈແລ້ວຕີ? ຈົ່ງຈື່ເອົາໄວ້ວ່າ ບໍ່ມີຈັກເທື່ອທີ່ຂ້ອຍຈະໄປເສຍເວລາບັນຍາຍບົດຮຽນໃຫ້ເຈົ້າ ຖ້າຮູ້ວ່າເຈົ້າເປັນພຽງແຕ່ຄົນພານຜູ້ຫນຶ່ງດັ່ງດຽວ... ກັບຫມໍວານດິກນັ້ນ. ແຕ່ແລ້ວເຈົ້າຊ້ຳຕີລາຄາບັນຫານີ້ບໍ່ໄດ້ຫມົດ. - ດວງຕາທັງຄູ່ຂອງຍິງສາວເຕັມໄປດ້ວຍແວວແຫ່ງຄວາມໂກດແຄ້ນ.

- ຂໍລາຍານາງໄປຕະຫລອດການ, - ຂ້າພະເຈົ້າເວົ້າແລ້ວຫັນຫນ້າອອກສູ່ປະຕູ ເມື່ອເຫັນວ່າຈະຮ້ອງຂໍວິງວອນຢ່າງໃດກໍໄຮ້ປະໂຫຍດ.

ຂ້າພະເຈົ້າຍ່າງຜ່ານສວນອຸທິຍານເປັນຄັ້ງສຸດທ້າຍແລ້ວໄປຢືນຢູ່ຂ້າງຮົ້ວ ເຊິ່ງດ້ານຫລັງຂອງມັນມີພຸ່ມໄມ້ເຕ້ຍໆນັ້ນຢູ່ຄາວຫນຶ່ງ.

"ຂໍລາຈາກພວກສູໄປຕະຫລອດການກ່ອນເດີ, ງູເດີ", - ຂ້າພະເຈົ້າຄຶດຢູ່ໃນໃຈແລະແນມເບິ່ງພວກງູດ້ວຍຄວາມຫງອຍເຫງົາ. ຍ້ອນພວກມັນນີ້ແຫລະຂ້າພະເຈົ້າຈຶ່ງຕ້ອງລຳບາກໃຈຄືແນວນີ້. ແຕ່ປານນັ້ນພວກງູເດີຍເອີກໍຄົງນອນສະບາຍຢູ່ພາຍໃຕ້ແສງແດດອັນອົບອຸ່ນແຫ່ງດວງອາທິດ.

ຂ້າພະເຈົ້າສົ່ງພວງກະແຈຂອງອຸທິຍານໃຫ້ລຸງຫລີ ແລ້ວກັບຄືນມາຍັງເຮືອນນ້ອຍຂອງຕົນດ້ວຍຄວາມອຶດເມື່ອຍໃຈ. ຄວາມຜິດຫວັງມາຂົບຫຍ້ຳຂ້າພະເຈົ້າ. ຂ້າພະເຈົ້າເບື່ອຫນ່າຍຍ້ອນ

ອັບອາຍຂາຍໜ້າ. ການກະທຳອັນຕ່ຳຕ້ອຍແລະຄວາມໃຈເບົາເອົາຄວາມງ່າຍທັງມວນຂອງຂ້າພະເຈົ້າຄ້າຍຄືກັບວ່າມັນປະກົດຕົວຂຶ້ນມາຢູ່ຕໍ່ໜ້າຂ້າພະເຈົ້າ. ນ້ຳຕາຂ້າພະເຈົ້າພັງຍ່ວາອອກມາ. ໂອ້, ຫາກວ່າໄດ້ພົບກັບສາດສະດາຈານແທ້, ເຮົາຈະເລົ່າໃຫ້ເພິ່ນຟັງທຸກຢ່າງແລະອ້ອນວອນຮ້ອງຂໍຄວາມອະໄພໂທດຈາກເພິ່ນ!

ຂ້າພະເຈົ້າໄດ້ແຕ່ນັ່ງຊືມຢູ່ແບບນັ້ນຈົນເຖິງຍາມທີ່ສາລະວັດມາເຖິງແລະອອກຄຳສັ່ງໃຫ້ຂ້າພະເຈົ້າຕຽມພົກຕຽມຫໍ່. ພວກຄົນຈີນນຳຕົວ ວານດິກ ມາເຖິງ. ສາລະວັດເຂົ້າໄປນັ່ງໃນລົດໂອໂຕກ່ອນ.

-ອ້າວ, ພວກເພື່ອນ, ຂຶ້ນລົດສາດິ, -ເຂົາກ່າວ. -ແລະກໍຢ່າຄຶດເຖິງເລື່ອງເຕັ້ນໂຕນໂຍນໜີໃນລະຫວ່າງທາງ. ເຮົາຍິງໃດ.

ຜູ້ຂັບຕິດຈັກລົດ. ນາງ ລີເຍີແລ່ນມາແຕ່ຫ້ອງທິດລອງ.

-ທ່ານກະລຸນາສົ່ງຈົດໝາຍສະບັບນີ້ໃຫ້ຊຸນສານແດ່, -ນາງເວົ້າແລະມອບຊອງຈົດໝາຍທີ່ໜາປຶກອັນໜຶ່ງໃຫ້ແກ່ສາລະວັດ.

ນາງບໍ່ຕ້ອງການແນມເຈົ້າເລີຍ. ສາລະວັດເຊື່ອງຊອງຈົດໝາຍນັ້ນເຂົ້າໃນແຂບແຂນເສື້ອຢ່າງເປັນການເປັນງານແລ້ວຮ້ອງອອກຄຳສັ່ງ:

-ໄປ!

ວານດິກ ຄ່ອຍໆຊູໜວກຂາດຂຶ້ນມາໂບກຢ່າງທຸ່ນທ່ຽງ:

-ລາກ່ອນເດີ ຍານາງ. ຂ້ອຍຂໍສົ່ງຄວາມເຄົາລົບເຖິງສາດສະດາຈານດ້ວຍ.

ເຂົານັ່ງທາງໜ້າຂ້າພະເຈົ້າ, ມືທັງສອງກຸມກະເປົາໄວ້ແໜ້ນໆ. ບັດນີ້ຂ້າພະເຈົ້າຈຶ່ງມີໂອກາດແນມເບິ່ງ ວານດິກຢ່າງລະອຽດລະອໍ. ເພາະເທື່ອກ່ອນໆນັ້ນ ຂ້າພະເຈົ້າໄດ້ເຫັນເຂົາແຕ່ພຽງຍາມຄ່ຳຄືນ. ນັບແຕ່ມື້ທີ່ພວກຂ້າພະເຈົ້າໄດ້ພົບກັນຢູ່ ແບັນຣັກບໍ ມາເຖິງມື້ນີ້, ເຂົາບໍ່ໄດ້ເຖົ້າໄປຈັກໜ້ອຍເລີຍ, ຍິ່ງກ່ວານັ້ນເບິ່ງແລ້ວປະກົດວ່າ ຍັງໂຄກ່ວາເກົ່າຊ້ຳອີກ ແລະກໍບໍ່ໄດ້ຄືກັບຄົນອຶດຫິວເລີຍ.

-ບົນ ນັບວ່າເປັນໂຊກດີສຳລັບເຈົ້າໃດ, -ເຂົາເວົ້າຜ່ານຫວ່າງແຂ້ວ. -ເຈົ້າເປັນພຽງແຕ່ພະຍານເທົ່ານັ້ນ. ສ່ວນເຮົາບໍ່ມີໂທດຫຍັງ...

- ຫ້າມລືມກັນ! - ສາລະວັດເວົ້າຕັດບົດເຂົາ.

- ໃສພວກຂ້ອຍຊິໄດ້ລືມກັນ, - ວານດິກ ຫົວເບະສິບ. - ຂ້ອຍພຽງແຕ່ເວົ້າເລື່ອງທີ່ຂ້ອຍຄຶດນັ້ນຂຶ້ນດັງໆເທົ່ານັ້ນ. ປະກົດວ່າໃນຊອງຈົດໝາຍປຶກໜານາງທີ່ສິ່ງເກີງຊຸນສານນັ້ນລ້ວນແຕ່ບັນຈຸຫລັກການທຸກຢ່າງໄວ້... ແຕ່ຢ່າງໃດກໍດີ, ຂ້ອຍກໍຈະຫຸບປາກໄວ້ຢູ່ດອກ, ທ່ານສາລະວັດເອີຍ.

ຂ້າພະເຈົ້າເອງກໍນັ່ງງຽບຢູ່ ແລະຄຶດເຖິງຄຳເວົ້າຕ່າງໆຂອງນາງ ລີເຢີ. ກັງສາດສະດາຈານໄປພ້ອມກັບສາດສະດາຈານ ໂຮນເຊີ ແລ້ວ, ເລື່ອງຫຍັງທີ່ນາງຈະຕ້ອງໃຊ້ຫຸ່ນເພື່ອງເພື່ອຫລອກຂ້າພະເຈົ້າ? ເລື່ອງນີ້ຂ້າພະເຈົ້າບໍ່ສາມາດເຂົ້າໃຈໄດ້.

ລົດແລ່ນບໍ່ໄວພໍເທົ່າໃດ. ບົນເສັ້ນທາງໄປສູ່ຕົວເມືອງ, ພວກຂ້າພະເຈົ້າພົບກອງຄົນຫລາຍເຫລົ້ມທີ່ບັນທຸກເຄື່ອງຕ່າງໆດັງກອດໆແກັດໆ ໂດຍແມ່ນພວກລໍຫູໃຫຍ່ແກ່ມາແຕ່ທົດກົງກັນຂ້າມ. ຝູງລົບຫນັງເຫລືອງຈືດ, ແຫ້ມແດດ, ສວມກຸບ, ຄອນກະບຸງເບົ່າ. ເຂົາເຈົ້າໄດ້ກັບຈາກການນຳເອົາໝາກພົນໃນການອອກແຮງງານຂອງເຂົາເຈົ້າ ໄປຂາຍຢູ່ຕະຫລາດຕ່າງໆທີ່ຮັງກູນ. ລົດຂອງພວກຂ້າພະເຈົ້າຢຸດຢູ່ທີ່ຝັ່ງເຊ, ຢູ່ພາຍໃຕ້ຮົ່ມເຢັນຂອງມວນຕົ້ນພ້າວ. ຜູ້ຂັບໄດ້ກອກນ້ຳເຢັນໃສ່ໃນຫມໍ້ນ້ຳລົດ.

ນັກຫລິ້ນກົນຜູ້ຫນຶ່ງ ແກຫົວໂລ້ນຍືນຢູ່ແຄມທາງພວມສອນວິຊາໃຫ້ຜູ້ຊ່ວຍວັກຂອງຕົນເຊິ່ງເປັນຊາວຫນຸ່ມຫນ້າມອດ, ມີຂົນຄິ້ວດົກດຳ ຊາຍຜູ້ວ່ານີ້ພວມຮຽນເບິ່ງຊຸ່ຍ. ພວກເດັກນ້ອຍເປືອຍຕົວນັ່ງເອະຢູ່ອ້ອມຂ້າງ ແລະພວມຈ້ອງຕາແນມເບິ່ງຜູ້ເປັນລູກສິດທີ່ພວມເລື່ອນປາຍນິ້ວມືໄປຕາມຮູຂຸ່ຍ. ລີງຕົວຫນຶ່ງທີ່ມີຂົນສີມິ່ນນັ່ງຢູ່ບ່າຂອງຄົນຂໍທານຕາບອດແລະເດ່ຝາມືທີ່ເປັນຕາຢາກຫົວຂອງມັນມາຮັບເອົາຂອງໃຫ້ທານ.

ຄົນຜູ້ຫນຶ່ງ ຄຽນຫົວດ້ວຍແພຂຽວນັ່ງອີງຫລັງໃສ່ຕົ້ນໄມ້, ພວມຍັດເສັ້ນຢາສີເຫລືອງໃສ່ໃນກອກຂອງຕົນ, ລາວຈ້ອງມອງເບິ່ງຂ້າພະເຈົ້າແລະ ວານດິກ. ວານດິກແນມເບິ່ງລາວແລ້ວເກົາງກະແຕ້ຫູ.

- ບົນ ຢ່າເຮັດຊີງຫມົດຫວັງຈັ່ງຊັ້ນແມ້, - ວານດິກຊິ່ມໃສ່ຂ້າພະເຈົ້າດ້ວຍຄວາມລະມັດລະວັງເພື່ອບໍ່ໃຫ້ສາລະວັດໄດ້ຍິນ. - ຂ້ອຍຊິຫາວິທີແກ້ຕົວກັບອີ່ຕາເຖົ້າຜູ້ພິພາກສາໃຫ້ເບິ່ງເດີ.

ຄົນຜູ້ທີ່ມີແພຂງວຄຽນຫົວນັ້ນແກ້ເຊືອກຜູກມ້າແດງ ຂາສ້ວຍໂຕນັ້ນອອກ, ກະໂດດຂຶ້ນເທິງຫລັງມັນ ແລ້ວກຶກາງເຊືອກ. ມ້າສັກຂະໂຍງຂຶ້ນແລ້ວຫອບເອົາຂີ້ຝຸ່ນກຸ້ມໄປສູ່ຕົວເມືອງ.

## IV

ຢູ່ທາງທິດຕາເວັນອອກພີ້ເຂົາເຈົ້າບໍ່ຢາກປະໃຫ້ຜູ້ຕ້ອງຫາຕ້ອງລໍຖ້າດົນ. ລົດມາຢຸດຢູ່ຕໍ່ໜ້າຕຶກນ້ອຍຫລັງໜຶ່ງ. ພວກຂ້າພະເຈົ້າລົງຈາກລົດ, ສ່ວນຜູ້ຂັບກໍໄດ້ຂັບລົດຕໍ່ໄປເພື່ອນຳເອົາກຶງໄປສະນີ ໄປຍັງຫ້ອງການພານິດຂອງທ່າກຳປັ່ນ. ລາວສັນຍາວ່າຈະກັບມາຮັບເອົາສາລະວັດຜູ້ນັ້ນກັບຄືນ. ເປັນອັນວ່າຂ້າພະເຈົ້າແລະວານດິກໄດ້ໄປຢືນຢູ່ຕໍ່ໜ້າຂອງຜູ້ພິພາກສາ. ແຕ່ແລ້ວເຂົາເຈົ້າກໍບໍ່ໄດ້ຜູກໂທດຂ້າພະເຈົ້າ. ວານດິກເວົ້າຖືກແລ້ວ, ປານກັບວ່າມັນຮູ້ຈັກເນື້ອໃນຈິດໃຈຫມາຍຂອງນາງ ລີເຢີໄດ້ຢ່າງຈະແຈ້ງນີ້ແຫລະ.

ທ່ານຜູ້ພິພາກສາບໍ່ທັນໄດ້ແກຸຫນວດແກຸເຄົາເລີຍ, ແລະສະແດງອອກຢ່າງຈະແຈ້ງວ່າຍັງນອນບໍ່ທັນເຕັມຕາເທື່ອ, ລາວທັງຟັງສາລະວັດເວົ້າທັງເຮັດໜ້າຫົວຄືວ່າສິນແບມເບິ່ງ ວານດິກຢ່າງງຽບໆ.

- ປະກົດວ່າປີກາຍນີ້ ຂ້ອຍໄດ້ເບລະເທດເຈົ້າອອກໄປເທື່ອໜຶ່ງແລ້ວແມ່ນບໍ່? ແມ່ນເຈົ້າຕີເບາະ? ແຕ່ຈະແມ່ນເຈົ້າຫລືແມ່ນໃຜກໍຄືກັນຫັ້ນລະ. ພວກອັນຕະພານນີ້ ຍາມໃດກໍເປັນຫນ້າລົງໄສທັງນັ້ນ, ສ່ວນຜູ້ທີ່ຂີ້ຕີປົບຫນີຈາກພວກຫມາແລ້ວຄາດລາດເຂົ້າໄປໃນປະຕູປ່ອງຢ້ຽມຂອງຜູ້ອື່ນໃນຍາມຄໍ່າຄືນນັ້ນ ມັກກໍ່ລ້ວນແຕ່ແມ່ນເລື່ອງກໍ່ກວນຄວາມສະຫງົບ. ແຕ່ເຈົ້າກຶກຕູ່ຫາເປັນຄົນລັກງ. ເກັ່ງຫລາຍ. ຖ້າເຈົ້າສາມາດລັກງູຢູ່ໃນໂລກນີ້ໄດ້ຫມົດທຸກໂຕແລ້ວ ມັນກໍຈະເປັນກຸສົນອັນຍິ່ງໃຫຍ່ໃຫ້ແກ່ມວນມະນຸດ. ມັນແມ່ນພວກສັດທີ່ເປັນຕາຊັງເກີງຂັ້ນອະເຫລືອງຄືງ...

- ງູພວກນັ້ນແມ່ນກຳມະສິດຂອງສາດສະດາຈານ ມິນໂຮຍເຊີ, - ສາລະວັດລາຍງານ.

- ອາ, ຈັ່ງຊັ້ນຫວະ, ຫມາຍຄວາມວ່າ ງູກໍເປັນສົມບັດສ່ວນຕົວ? ເອົາລະ, ອັນນັ້ນກືວ່າເປັນເລື່ອງຫນຶ່ງຕ່າງຫາກ. ງູຫຍັງລະ?

ສາລະວັດຫາກໍອ້າປາກຈະເວົ້າ. ແຕ່ປະກົດວ່າ ວານດິກ ໄດ້ລໍຖ້າຈັງຫວະນີ້ມາແຕ່ດົນແລ້ວ. ເຂົາຍົກກະເປົາແພປ່ານນັ້ນຂຶ້ນ ແລ້ວກອກງູລົງເທິງໜ້າໂຕະຂອງຜູ້ພິພາກສາທີ່ເຄັ່ງຄັດນັ້ນ.

- ພວກມັນຢູ່ນີ້, ຮຽນທ່ານໄອຍະການສານ... ເປັນພວກງູ ເດີຍເຄີ ຊົນດີ...

ຟ້າເອີຍ, ສະພາບການນັ້ນມັນສະຫຍົດສະຫຍອງແທ້ໆ! ແຕ່ໜ້າເສຍດາຍແຕ່ວ່າເວລານັ້ນ ຂ້າພະເຈົ້າບໍ່ມີເຄື່ອງຖ່າຍຮູບເງົາ!

ເມື່ອພົບກັບສິ່ງແວດລ້ອມໃໝ່, ພວກງູ ເດີຍເອີ ກໍພາກັນຮ້ອງຈົດໆຂຶ້ນ, ພວກມັນສວ່າງອາລົມເພາະໄດ້ອອກມາສູ່ແສງສະຫວ່າງ. ພວກມັນບໍ່ໄດ້ຄໍາຮູ້ຄືຍາມຄໍ່າຄືນອີກ. ພຽງຊົ່ວພິບຕາດຽວພວກມັນກໍເລືອໂງເງຢູ່ເທິງໜ້າໂຕະ, ຫມົ້ນເຂົ້າໄປຍັງແຟ້ມເອກະສານຕ່າງໆ, ຫມົ້ນຜ່ານໃບເຈ້ຍ, ຕໍາຣະຕໍາຮາມໄປຮອດກະທັ້ງຈອກນໍ້າມຶກ, ງູສອງໂຕໄປກັງວກອດເອົາແທ່ນຕັ້ງທຽນໄຂ. ພວກບໍ່ມີວຽກມີງານຫຍັງທີ່ສະຫລອກກອກມານັ່ງເຕັມສາມແຖວຢູ່ເທິງຕັ່ງອີ້ທີ່ຈັດໄວ້ສໍາລັບມວນຊົນນັ້ນ ກໍພາກັນແຕກຫນີຢ່າງອຶກກະທຶກທ້າຍຽບຍໍ່າກັນທັງຮ້ອງແຜດຮ້ອງເຫລືອວ່າ:

- ງູ ເດີຍເອີ!

ທ່ານຜູ້ພິພາກສາກະໂດດຂຶ້ນເທິງຕັ່ງນວມທັງປາກຮ້ອງເປັນສຽງເຫລືອອອກມາວ່າ:

- ສາລະວັດຢູ່ໃສ? ທັບຫົວມັນແດ່!

ປະກົດວ່າສາລະວັດຕັ້ງແກ້ງເຂົ້າໃຈຜິດຕໍ່ຄໍາສັ່ງຂອງທ່ານຊຸນສານ, ເຂົາຈັບເອົາໄມ້ຄ້ອນຕໍາຫລວດທີ່ເຮັດດ້ວຍຢາງນັ້ນແລ່ນໄລ່ຝູງຊົນເພື່ອຈະທັບຫົວເຂົາເຈົ້າ. ສໍາລັບເຂົາແລ້ວ, ນັບວ່າເປັນເງື່ອນໄຂດີທີ່ສຸດເພື່ອຈະໄດ້ເອົາຕົວລອດໄປຈາກຝູງງູ ເດີຍເອີ.

- ບັກລໍໂງ່ເອີຍ! ບໍ່ແມ່ນພວກນັ້ນ!... - ທ່ານຊຸນສານແຜດຂຶ້ນແລ້ວໂດດອອກຈາກປ່ອງຢ້ຽມໄປຢ່າງສະຫລາດ.

ສະຫມຽນຫົວລ້ານຟ້າວແລ່ນມະລຸບພຸບພາບຕາມຫລັງທ່ານຊຸນສານອອກໄປ, ເອົາທັງງູ ເດີຍເອີ ທີ່ກັງວແຫນັ້ນໆຢູ່ກັບຄໍເກີບໂບກນັ້ນໄປນໍາ.

ເວົ້າດ້ວຍຄວາມຈິງໃຈແລ້ວ, ເມື່ອງູໃຫຍ່ເກືອບສາມສິບໂຕຫາກມາລີເລືອສວ່ານສິນຢູ່

ເຫິງໂຕະເຮັດວຽກຂອງເພື່ອນແລ້ວ, ຂ້າພະເຈົ້າແນ່ໃຈວ່າເພື່ອນເອງກໍຈະບໍ່ຫວາດຫວັ່ນຫຍັງເລີຍຕໍ່ການທີ່ຈະເອົາຫົວຊົນປະຕູແກ້ວປ່ອງຢ້ຽມອອກໄປເພື່ອເອົາຕົວລອດ.

- ບັດນີ້ຍັງເຫລືອແຕ່ເຮົາສອງຄົນ, - ວານດິກ ເບະສົບຫົວ. - ໄວໆແດ່, ສວຍໂອກາດເວລາອີ່ຕາເກົ້າຊຸນສານຍັງຕັ້ງສະຕິບໍ່ໄດ້ນີ້. ຈົ່ງເຮັດໃຈກ້າອອກຈາກເຮືອນນີ້ໄປ, ແຍກໄປທາງຂວາ, ເຈົ້າຈະພົບຄົນຜູ້ຫນຶ່ງຂີ່ມ້າສີແດງ, ຈົ່ງເວົ້າກັບມັນວ່າ: "ຕາງົວເກິກ" ແລ້ວມັນກໍຈະເອົາເຈົ້າຫນີລອດໄປໄດ້.

ຂ້າພະເຈົ້າເວົ້າຂຶ້ນສຽງດັງເກືອບເປັນສຽງແຜດໃສ່ ວານດິກວ່າ:

- ຂ້ອຍບໍ່ຕ້ອງການການຊົດຊ່ວຍຂອງເຈົ້າ!

ແມ່ນແລ້ວ, ຂ້າພະເຈົ້າໂກດແຄ້ນເຕັມທົນ, ບາງທີຂ້າພະເຈົ້າອາດພຶງຄຳພຶງຄາງຂຶ້ນຄືກັບງູເຫົ່າພວມໃຈຮ້າຍນີ້ໄປແລ້ວບໍ່ຈັກລະ.

ວານດິກເວົ້າຕໍ່ໄປວ່າ:

- ສ່ວນຂ້ອຍກໍຫນ້າເສຍດາຍທີ່ສຸດທີ່ຕ້ອງພາກຈາກເຈົ້າ.

ຂ້າພະເຈົ້າກັບຫລັງຫັນຫນີຈາກຕຶກສານທີ່ບໍ່ມີຄົນພໍເງົາເຫລືອຢູ່ນັ້ນໄປ, ຂ້າພະເຈົ້າບໍ່ຄິດເຖິງອະນາຄົດແລະບໍ່ລະນຶກເຖິງອະດີດຫຍັງເລີຍ.

ປະກົດວ່າຄົນຂີ່ມ້າຜູ້ພັນຫົວດ້ວຍແພຂຽວນັ້ນພວມລໍຂ້າພະເຈົ້າຢູ່ຫ່າງຈາກຫ້ອງການສານປະມານຮ້ອຍບາດກ້າວ.

ຂ້າພະເຈົ້າຍ່າງກາຍລາວໄປ, ບັງເອີນຄວາມຊົງຈຳສະຫລອກກອກອັນນັ້ນກະຕຸ້ນເສັ້ນຂ້າພະເຈົ້າ. ຂ້າພະເຈົ້າງວາກມາເວົ້າ:

- ຕາງົວເກິກ.

- ຂຶ້ນຂີ່ມ້າກັບຂ້ອຍໄວ, - ລາວຕອບ.

ຂ້າພະເຈົ້ານັ່ງທາງຫລັງແລະກອດລາວແຫນ້ນໆ. ລາວໃຊ້ສົ້ນຕີນທຸບເຂົ້າໃສ່ສີ້ວງຂອງສັດ. ມັນຫອບສັກຂະໂຢງຂຶ້ນ.

- ດິນຟ້າອາກາດແຫ່ງນີ້ບໍ່ເຫມາະກັບບ່າວຜູ້ນີ້, - ຊົ່ວໂມງຫນຶ່ງຕໍ່ມາ "ຕາງົວເກິກ" ເວົ້າແບບນີ້ກັບ ກັບຕັນເຮືອພານິດຜູ້ອວນພີກາມກືງທີ່ພວມນັ່ງດື່ມເຫລົ້າຢູ່ໃນຮ້ານກິນດື່ມທີ່ທ່າ

ກຳປັ່ນ. ຂ້າພະເຈົ້າຫຼຸບນ້ຳແກງຫມົດໄປກ້ວຍຫນຶ່ງ, ເມື່ອຍເພຍໄປທັງຄືງເພາະຄວາມຕື່ນຕົກໃຈຢ່າງແຮງໃນຫວ່າງຢ່ານີ້.

- ໂຕຮູ້ວ່າເຂົາພວມເວົ້າຫຍັງໃຫ້ໂຕບໍ່ລະ? - ກັບຕັນເຮືອພານົດເວົ້າສຽງທຸ້ມໆ. - ແມ່ນຫັ້ນແຫລະ, ຕາເວັນຢູ່ນີ້ມັນກໍໂພດເຫລືອຮ້າຍ...

- ຄວນແທ້ຂ້າພະເຈົ້າກໍຕ້ອງສະແດງຄວາມຂອບໃຈຕໍ່ທ່ານເປັນຢ່າງສູງແລ້ວ, ທ່ານຫົວຫນ້າກຳປັ່ນ...

- ເອ, ບັກຫມູໂຄກ ມຶງເອີຍ, ຈົນປານນີ້ກໍຍັງບໍ່ຈັກຈຳແນກກະທັ່ງເຄື່ອງຫມາຍຂອງກັບຕັນກຳປັ່ນພານິດ ແລະເຄື່ອງປະດັບຍົດຂອງຫົວຫນ້າກຳປັ່ນຮົບຊ້ຳຫວະ. ປານນັ້ນຂ້ອຍກໍຮ່າວຄຶດວ່າຈະເອົາເຈົ້າຂຶ້ນເຮືອ "ລິດານິອາ" ໄປທັດສະນາຈອນທົ່ວທັງສີ່ມະຫາສະຫມຸດນຳອີກ. ເອົາລະ, ຂ້ອຍຈະປ່ອຍເຈົ້າຂຶ້ນ ຮົງກົງ, ຫລັງຈາກນັ້ນ ຢາກຈະຫມົ້ນໄປໃສກໍຕາມໃຈ.

ຂ້າພະເຈົ້າເອີ່ຍເຖິງ ວານດົກ, ແຕ່ທັງສອງຄົນລ້ວນແຕ່ຕີເຮັດເມີນເສີຍໄປ ເຫມືອນກັບບໍ່ເຂົ້າໃຈວ່າຂ້າພະເຈົ້າເວົ້າຫຍັງນີ້ແຫລະ.

ຕົກຕອນຄ່ຳເຂົາເຈົ້າໃຊ້ເຮືອພາຍນຳຕົວຂ້າພະເຈົ້າຂຶ້ນໄປຍັງກຳປັ່ນບັນທຸກເຄື່ອງ. ທ່ານກັບຕັນຜູ້ໃຫຍ່, ຕຸ້ຍຄົນນັ້ນ ຢືນຢູ່ເທິງດາດຟ້າກຳປັ່ນຮ້ອງມາໃສ່:

- ຂຶ້ນມາ, ນ້ອຍ! ພໍ່ຄົວພວມຕ້ອງການຄົນປອກມັນຝະລັ່ງ.

## ຕອນທີຫົກ

### I

ຕະຫລອດເສັ້ນທາງນັ້ນ ຂ້າພະເຈົ້າໄດ້ຮຽນວິທີແຕ່ງຢູ່ຄົວກິນ ແລະເມື່ອເຖິງ ຮົງກົງ, ໂດຍອີງໃສ່ການຊ່ວຍເຫລືອຢ່າງຈິງໃຈຂອງພໍ່ຄົວ, ຂ້າພະເຈົ້າກໍໄດ້ວຽກເຮັດຢູ່ເທິງກຳປັ່ນ "ກຣີແວັກເຢີ". ກຳປັ່ນເຫລັ້ມນີ້ເຄີຍເດີນທາງດ່ວນໄປຍັງ ຊານພຣານຊິສໂກ. ແຕ່ຂ້າພະເຈົ້າກໍມາພົບໂຊກຮ້າຍອີກຄັ້ງຫນຶ່ງ. ເມື່ອກຳປັ່ນອອກເດີນທາງເປັນເວລາສາມມື້ແລ້ວ, ໃນຂະ

ນະທີ່ນຳເອົາຊຸບຈືນເຂົ້າໄປຍັງຫ້ອງອາຫານ ເພື່ອໃຫ້ແຂກຮັບປະທານອາຫານທ່ຽງນັ້ນ, ຂ້າພະເຈົ້າເລີຍເຮັດນ້ຳແຈ່ວຂວ້ຳໃສ່ເສື້ອຂອງທ່ານລັດຖະມົນຕີອາກຊັງຕິນທ່ານໜຶ່ງ ໂດຍບໍ່ເຈດຕະນາ. ເລື່ອງນີ້ຄົງບໍ່ເກີດຂຶ້ນ, ຖ້າມື້ກ່ອນນີ້, ເຂົາເຈົ້າຫາກບໍ່ເລົ່າເລື່ອງທີ່ເປັນໜ້າຫວາດກົວກ່ຽວກັບລະເບີດລອຍໃຫ້ຂ້າພະເຈົ້າຟັງ. ໃນຂະນະທີ່ຂ້າພະເຈົ້ານຳເອົາຊຸບຈືນຂຶ້ນໄປນັ້ນ ທັນໃດກໍມີສຽງແຕກປົມບາດໜຶ່ງ, ພາໃຫ້ຂ້າພະເຈົ້າຄຶດວ່າກຳປັ່ນ "ກຣີແວັກເຢີ" ຕຳລະເບີດລອຍສາແລ້ວ. ແຕ່ແລ້ວ, ນັ້ນເປັນພຽງແຕ່ສຽງບັນເລງຂອງວົງດົນຕີໃນ "ຈັງຫວະເດີນ" ເທົ່ານັ້ນເອງ.

ເພື່ອເປັນການລົງໂທດ, ເຂົາເຈົ້າປົດຂ້າພະເຈົ້າຈາກຫ້ອງອາຫານໃຫ້ໄປຢູ່ເຮືອນຄົວ ແລະເຮັດໜ້າທີ່ບັນຊາກ໊ອກສິ່ງນ້ຳຮ້ອນໄປຍັງກະຖັງລ້າງຖ້ວຍຕ່າງໆ. ແຕ່ເມື່ອ ຝັ່ງ ກາລີຟໍເນຍ ໄດ້ປະກົດຕົວຂຶ້ນຢູ່ຂອບຟ້າພຸ່ມແລ້ວ ຜູ້ຊ່ວຍວຽກຫົວໜ້າກຳປັ່ນກໍຫັນໃຈໃຫຍ່ແລະເວົ້າກັບຂ້າພະເຈົ້າດ້ວຍຄວາມອ່ອນຫວານວ່າ:

- ເຫັນທີຊິຕ້ອງພາກຈາກກັນແລ້ວ, ເຊມຸຍແອນເອີຍ!

ເປັນອັນວ່າພວກເຮົາໄດ້ອຳລາຈາກກັນໄປ.

ຊານຟຣານຊິສໂກ ໄດ້ຕ້ອນຮັບຂ້າພະເຈົ້າຢ່າງອົບອຸ່ນ. ຂ້າພະເຈົ້າບໍ່ມີພອນສະຫວັນທາງດ້ານສິນລະປະ ດັ່ງນັ້ນຈຶ່ງເຫັນວ່າບໍ່ຈຳເປັນຈະໄປຍັງນະຄອນແຫ່ງຮູບເງົາ ຮັອນລີວູດ ນີ້. ແຕ່ແລ້ວ, ໂຮງງານກະປອງຟູແຫ່ງໜຶ່ງຕຽມພ້ອມທີ່ຈະຮັບເອົາຂ້າພະເຈົ້າ. "ບຸກຊຸກ" ເປັນກຳປັ່ນເຫລັ້ມໜຶ່ງ ທັງເປັນໂຮງງານໃຫຍ່ແຫ່ງໜຶ່ງກໍວ່າໄດ້. ມັນອອກສູ່ທະເລຄັ້ງລະປະມານສອງອາທິດ ເພື່ອຫາປາ. ເຂົາເຈົ້າມອບພາລະໃຫ້ຂ້າພະເຈົ້າຮັບຜິດຊອບໜຶ່ງໃນຈຳນວນຫົກກະຖັງຂະໜາດຍັກທີ່ບັນຈຸປາຊາກດິບເປັນເຕັມອັດຢູ່. ກຳປັ່ນ "ບຸກຊຸກ" ຈະກຸ້ມປາຊາກດິບ ລົງທະເລ ເພື່ອອ່ອຍປາເຖິງທະເລມາມໍ່ກຳປັ່ນ.

ການຈັບປາເລີ່ມຕົ້ນ. ບໍ່ມີມອງຊະນິດໃດຈະຈັບປາເຖິງທະເລໄດ້.

ພວກມັນມີແຕ່ໄລ່ແຫບປາຊາກດິບ. ດ້ວຍເຫດນັ້ນ ເຂົາເຈົ້າຈຶ່ງປ່ອຍຂົວແປັນແຄບໆ ຈາກກຳປັ່ນລົງແທດກັບໜ້ານ້ຳ, ແລະຈັດວາງນັກຕຶກເບັດທີ່ມີປະສົບການຢືນຢູ່ເທິງຂົວນັ້ນ. ສອງຄົນໃດຮັບຜິດຊອບຄັນເບັດຄັນໜຶ່ງ, ສ່ວນຜູ້ທີ່ສາມແມ່ນກຳຊ້ອນລໍຖ້າຕັກ. ປາຫິວ

ເຫຍື່ອຈະສວາບກິນປາຊາກດິບ ທີ່ສຽບໃສ່ເບັດນັ້ນ. ພວກນັກຕຶກເບັດດຶງປາຖືກເບັດຂຶ້ນມາໄດ້ແລ້ວກົ້ມໃສ່ບັນດາກະຖັງໄມ້ໃຫຍ່ໆ, ຈາກນັ້ນປາກໍຖືກນຳໄປປຸງແຕ່ງໃນທັນທີໂລດ. ຫລັງຈາກນັ້ນບໍ່ພໍຊົ່ວໂມງ ປາກໍຈະຖືກປະສົມເຄື່ອງເສີມລົດແລະສົ່ງໄປສູ່ຫ້ອງເຢັນພາຍຫລັງທີ່ອັດເຂົ້າກະປ໋ອງຮຽບຮ້ອຍແລ້ວ. ຫລັງຈາກທີ່ກົ້ມເຫຍື່ອອ່ອຍລົງນ້ຳພໍແລ້ວ, ຂ້າພະເຈົ້າກໍຢືນຢູ່ຂ້າງກະຖັງປາແນມລົງໄປເບິ່ງ ພວກນັກຕຶກປາເຮັດວຽກໄດ້ຢ່າງວ່ອງໄວຍິ່ງ. ຄາວດຽວກໍແກະປາກິນເບັດອອກມາໄດ້, ເກາະປາເຫຍື່ອໃສ່ເບັດ, ຟາດເບັດລົງໄປແລ້ວກໍຟ້າວພຶດຄັນເບັດຂຶ້ນແລະແກະປາເຄິງທະເລທີ່ໂລພານັ້ນນອກຈາກເບັດ.

ພວກຕຶກປາໄດ້ຮັບຄ່າແຮງງານຕາມແບບຮັບເຫມົາ. ພາລະຂອງເຂົາເຈົ້າຫນັກຫນ່ວງແລະອັນຕະລາຍຍິ່ງ. ບາງຄາວກໍມີປາສະຫລາມປະກົດຕົວຂຶ້ນ. ພວກມັນຄາບຄົງວກິນຫມູ່ປາຊາກດິບ ແລະເຮັດໃຫ້ພວກປາເຄິງທະເລຕ້ອງແຕກຫນີ. ຄາວນັ້ນ ເຂົາເຈົ້າກໍຈະໃຊ້ປືນຍິງປາສະຫລາມ, ຍ້າຍທີ່ຕັ້ງກຳປັ່ນແລ້ວການຫາປາກໍດຳເນີນຕໍ່ໄປ. ມີສຽງຫນຶ່ງຮ້ອງແຜດຂຶ້ນວ່າ:

- ເຮີຍ! ກົ້ມປາເຫຍື່ອລົງ, ໄວ! ເບື້ອງຊ້າຍເດີ!

ແຕ່ປາສະຫລາມ, ສັດນ້ຳທີ່ຮ້າຍກາດທີ່ສຸດ ປຽບດັ່ງເສືອທະເລເຫລົ່ານັ້ນບໍ່ເຄີຍຢຸດຕິການຕິດສ້ອຍຫ້ອຍຕາມ "ບຸກຊຸກ" ໄປເລີຍ. ພວກມັນລະມັດລະວັງ ແລະບໍ່ຟູດຕົວຂຶ້ນເທິງຫນ້ານ້ຳອີກ. ຍາມນັ້ນ ການຕຶກປາກໍຍິ່ງອັນຕະລາຍກ່ວາເກົ່າ, ປາສະຫລາມສາມາດສວາບເອົາຝາຕີນຂອງຄົນຕຶກປາໄປກິນກ້າເຂົາຫາກມົວແຕ່ເກົາເບິ່ງພຸ່ມພົ້ ຫລືແຕ່ລະຄັ້ງທີ່ແຜ່ນແປ້ນນັ້ນຫາກຖືກຟອງທະເລຍວກນ້ຳຂຶ້ນມາກົ້ມ.

ຄັ້ງຫນຶ່ງ ພວກເຮົາແນມເຫັນປາສະຫລາມໃຫຍ່ໂຕຫນຶ່ງ. ມັນປະຫລຸບປະໂຫລ່ຢູ່ເທິງຫນ້າມະຫາສະຫມຸດປາຊີຟິກທີ່ມີຟອງງຽບໆແລະເບິ່ງຄືວ່າມັນຕາຍແລ້ວນີ້. ກະລາສີເຮືອຫນຸ່ມຜູ້ເຄີຍຜ່ານປະສົບການມາຫລາຍສົມຄວນ ຄື ຕິນໂບຍ ໄດ້ຢືນຢັນວ່າມັນຍັງເປັນຢູ່, ແລະປະກົດວ່າປາສະຫລາມຮູ້ຈັກສະກົດຈິດຕົນເອງ ແລະເຮັດຕົວຟູອິ່ງລິ່ງຢູ່ເທິງມະຫາສະຫມຸດໄດ້ຕະຫລອດມື້ໃນຍາມທີ່ຫນ້ານ້ຳສະຫງົບ. ແຕ່ພໍຕົກເຖິງຍາມແລງ ຄວາມເຢັນຊື່ນ

ກໍຈະຊ່ວຍເຮັດໃຫ້ມັນຟື້ນສະຕິຄືນມາ, ບາດນັ້ນ ມັນກໍຈະກາຍມາດຸຮ້າຍແລະກະຫາຍເຫຍື່ອເປັນພິເສດ.

ຄືນໃດ ຂ້າພະເຈົ້າກໍຝັນເຖິງແຕ່ເລື່ອງຕຶກປາແລະຕື່ນສະເດີດຂຶ້ນມາເລື້ອຍໆ. ຂ້າພະເຈົ້າຮູ້ສຶກຄືກັບວ່າ ຕິນໂບຍພວມແຜດສຽງໃສ່ຂ້າງຫູເລື້ອຍໆ:

- ເຮີຍ! ກຸ້ມປາເຫຍື່ອລົງໄວ! ທາງເບື້ອງຂວາຂອງກຳປັ່ນເດີ!...

ກ້າຂ້າພະເຈົ້າຍືນປະຕິບັດງານຢູ່ເບື້ອງຊ້າຍຂອງກຳປັ່ນ, ເມື່ອໄດ້ຍິນສຽງດັ່ງກ່າວ, ຂ້າພະເຈົ້າຕ້ອງແລ່ນໄວໆຜ່ານປາກກະກັ້ງໄປເທິງແປ້ນແຜ່ນແຄບໆແລະມື່ນນັ້ນ ແລ້ວໃຊ້ຄຸຕັກປາຊາກດິນ ກອກລົງທະເລ.

ຂ້າພະເຈົ້າບໍ່ມັກເກມແລ່ນຜ່ານປາກກະກັ້ງນີ້ເລີຍ. ມີເທື່ອຫນຶ່ງ ຕິນໂບຍໄດ້ເຮັດໃຫ້ທຸກຄົນຕ້ອງສະທ້ານຍ້ານກົວຍ້ອນເລື່ອງຫນຶ່ງທີ່ເກີດຂຶ້ນກັບບັກນ້ອຍຜູ້ຊ່ວຍວຽກພໍ່ຄົວ, ມັນຫາຍຕົວໄປພ້ອມກັບການອອກຫາປາຄັ້ງກ່ອນ. ໃຜໆກໍຄຶດວ່າມັນຕົກລົງທະເລ. ຈົນກະທັ້ງຮອດຕອນກັບຄືນຍັງທ່າກຳປັ່ນ, ຂະນະນັ້ນປາຊາກດິນ ຢູ່ໃນກະກັ້ງຫມົດໄປແລ້ວ, ເຂົາເຈົ້າຈຶ່ງເຫັນບັກນ້ອຍນັ້ນຕາຍຈົມຢູ່ກົ້ນກະກັ້ງ. ບາງທີມັນອາດຂັດຕີນແລ່ນຫລົ້ນຢູ່ເທິງແປ້ນແຜ່ນນັ້ນເລີຍຫົວສັກລົງຫັ້ນຕິເບາະ.

ຂ້າພະເຈົ້າຊິນເຄີຍກັບການດຳລົງຊີວິດຢູ່ເທິງກຳປັ່ນ "ບຸກຊຸກ" ສາແລ້ວ, ທົ່ວທັງຄິງຂອງຂ້າພະເຈົ້າເຫມັນສາບຄາວອືນໄປດ້ວຍກິ່ນປາຊາກດິນ, ຂ້າພະເຈົ້າບໍ່ເມົາຄື້ນໃນຄາວມີພາຍຸໃຫຍ່ ແລະໃນຍາມທີ່ກຳປັ່ນກວາຍງອກແງ້ກຍ້ອນຟອງໃຫຍ່, ຂ້າພະເຈົ້າແລ່ນໄປແລ່ນມາຢູ່ເທິງກຳປັ່ນຢ່າງບໍ່ຈັບຮາວເລີຍ.

ຫລັງຈາກອອກຈັບປາສີ່ຄັ້ງ, ກຳປັ່ນ "ບຸກຊຸກ" ກໍກັບຄືນຢ່າງເຕັມອັດຍັດແຫນ້ນໄປດ້ວຍປາເຄິງທະເລ. ພວກເຮົາກໍມຸ່ງຫນ້າກັບໄປຍັງ ໂຕໂດຊານໂຕ, ພາຍຫລັງທີ່ໄດ້ຮັບໂທລະເລກບອກຂ່າວດີຂອງກັງວເດີນທາງທີ່ລ້ຳລວຍນີ້, ບາງທີພວກທ່ານເຈົ້າຂອງໂຮງງານຟູນີ້ໄດ້ຄິດໄລ່ເງິນກຳໄລຂອງຕົນຢູ່ໃນຫ້ອງການຕ່າງໆໄວ້ແລ້ວ. ຢູ່ເທິງດາດຟ້າກຳປັ່ນ, ພາຍໃຕ້ເງົາຂອງບັນດາກະກັ້ງເປົ່ານັ້ນ, ຊາວກະລາສີເຮືອກຳປັ່ນ "ບຸກຊຸກ" ກໍສຸມຫົວກັນເຂົ້າຫລິ້ນໄພ້ແລະຫມາກສະກາ. ບາງທີອາດເປັນຄັ້ງທຳອິດທີ່ຂ້າພະເຈົ້າໂຊກດີ. ຂ້າພະເຈົ້າຫລິ້ນ

ຫມາກສະກາກັບຕິນໂບຍ ແລະຂ້າພະເຈົ້າຊຸ່ນຫ້າຄັ້ງລຽນກັນ, ແຕ່ລະຄັ້ງໄດ້ຄະແນນຫົກສອງ ຫົນ. ຍ້ອນຄວາມເມົາມົວ, ຕິນໂບຍວາງເງິນລົງທົບເທົ່າ, ແຕ່ເງິນຈຳນວນດັ່ງກ່າວກໍຄົງ ເຂົ້າກົງຂອງຂ້າພະເຈົ້າຢ່າງລຽນຕິດ. ຕິນໂບຍ ບ້າຂຶ້ນກັບຫມ້ອງ. ລາວຢືມຫມາກສະກາຈາກ ກະລາສີເຮືອຄົນອື່ນ, ເຖິງປານນັ້ນກໍຕາມ, ເລກດໍກໍຄົງຕິດສ້ອຍຫ້ອຍຕາມຫມໍ່ຢ່າງແກະບໍ່ ອອກ. ຕິນໂບຍ ປະລາໄຊ, ຕ້ອງແກ້ເສື້ອປົກບ່າງພື້ນງານມາໃຫ້ຂ້າພະເຈົ້າແລະນຸ່ງເສື້ອເກົ່າ, ຂາດສ້ອຍຂອງຂ້າພະເຈົ້າໃສ່ຄືງທ່າມກາງສຽງຫົວເຮຮາຂອງທຸກໆຄົນ. ຈິດໃຈຂອງຂ້າພະເຈົ້າ ບໍ່ງມລົ້ນໄປດ້ວຍຄວາມສົດຊື່ນເພາະມີໄຊ ແຕ່ຂ້າພະເຈົ້າກໍພະຍາຍາມຮັກສາວາດເຢືອກເຢັນ ເອົາໄວ້.

ຕິນໂບຍ ແພດສຽງຂຶ້ນ:

- ກູຈະຫລິ້ນຈົນກ່ວາຈະເຖິງ ຊານຟຣານຊິສໂກ! ກູຈະແກ້ມືຄືນເຖິງແມ່ນວ່າຈະຕ້ອງເອົາ ວິນຍານໄປຈຳກັບພີຍັກກໍຕາມ...

ຫມໍວາງກະເປົານ້ອຍຫລາຍສີນັ້ນຂຶ້ນໃສ່ເທິງໂຕະຫມາກສະກາ ແລະກໍເສຍໃຫ້ຂ້າພະເຈົ້າ ອີກຕາມເຄີຍ.

ຄົນຊວຍຜູ້ນັ້ນຮ້ອງແພດຂຶ້ນ, ເລືອດຂຶ້ນຫນ້າຈົນແດງວິ່ງ:

- ເຊນຸຍແອນ, ກູຢາກຮູ້ວ່າມຶງມີວິທີໂກງແບບໃດເວີຍ?

- ມັນຫລິ້ນສັດຊື່ດີ, - ຊາວກະລາສີເຮືອທີ່ຢືນເບິ່ງຢູ່ອ້ອມໆນັ້ນອອກສຽງສະຫນັບສະ ຫນູນຂ້າພະເຈົ້າ.

ລົບເວນແນມຜ່ານກ້ອງສ່ອງ. ກຳປັ່ນ "ບຸກຊຸກ" ສົ່ງສຽງໂຫວດສັ້ນໆຂຶ້ນຮູດຫນຶ່ງ.

- ພຸ້ນເດ ແຫລມພະລູກາ, - ໃຜຜູ້ຫນຶ່ງເວົ້າ.

ໃຜໆກໍຫັນຫນ້າແນມມາທາງເບື້ອງຂວາຂອງກຳປັ່ນ. ພວກເຮົາພວມເດີນຜ່ານແຫລມ ຕອນໃຕ້ຂອງ ຄາລີຟໍເນຍ.

- ເອົາ, ຮອດທີມຶງ, ເຊນຸຍແອນ, - ຕິນໂບຍເວົ້າແລະຍື່ນກັບບັນຈຸຫມາກສະກາຢູ່ ເບື້ອງໃນນັ້ນມາໃຫ້ຂ້າພະເຈົ້າ.

ຂ້າພະເຈົ້າເດ່ມືໄປຮັບເອົາກັບຫມາກສະກາ...

ຂະນະດຽວກັນນັ້ນ ກຳປັ່ນ "ບຸກຊຸກ" ກໍຕັ້ງເທົ້ເລີຂຶ້ນ. ໄມ້ທ່ອນຫນຶ່ງບິນວູດຈາກກະກັງໃຫຍ່ມາທາງຂ້າພະເຈົ້າ. ແຕ່ສົ້ນຫນຶ່ງຂອງມັນທີ່ຫນັກອຶ້ງຕຶ້ງນັ້ນໄດ້ຟາດຖືກຫນ້າຂອງ ຕົນ ໂບຍ. ຄົນຜູ້ຫນຶ່ງກົ້ງຕາ, ເຕີປາກ ບິນວູດຜ່ານຫນ້າຂອງຂ້າພະເຈົ້າໄປ. ຈັກຈັ່ງໃດບຸ ຂ້າພະເຈົ້າຈຶ່ງໄປກຳເອົາກັບຫມາກສະການັ້ນແລ້ວໂດດລົງນ້ຳ.

ຂ້າພະເຈົ້າໄດ້ຍິນສຽງຫນຶ່ງຮ້ອງເຫລີຂຶ້ນຢ່າງຜິດຫວັງ:

- ຕຳມີນແລ້ວ!

ຫົວກຳປັ່ນແຕກທະລາຍ, ທ້າຍກຳປັ່ນສັກຂະໂຍງຂຶ້ນ, ໃບພັດຢູ່ເບື້ອງລຸ່ມຂອງມັນຍັງຄົງຫັນລື້ນໆຢູ່. "ບຸກຊຸກ" ພວມຈົມລົງນ້ຳຢ່າງວ່ອງໄວ. ໃຜໆກໍໂດດອອກຈາກທ້າຍກຳປັ່ນລົງນ້ຳ. ໃຜຜູ້ຫນຶ່ງປ່ອຍເຮືອພາຍຈຳນວນຫນຶ່ງ ແລະຢາງກູ້ກະທັນຫັນລົງມາເປັນໂຫລໆ. ຂ້າພະເຈົ້າລອຍຫ່າງອອກໄປເພື່ອບໍ່ໃຫ້ຂັນນ້ຳທີ່ເກີດຂຶ້ນຍ້ອນກຳປັ່ນທີ່ພວມຈົມລົງນັ້ນບິດເອົາໄປ. ເມື່ອນ້ຳກ້ວມຮອດທໍ່ຄວັນແລ້ວ, ສຽງແຕກທີ່ສະຫຍອງຂວັນກໍດັງລັ່ນຂຶ້ນແລະກຳປັ່ນທີ່ພວມຈົມລົບຢູ່ທ່າມກາງກຸ່ມອາຍນ້ຳແລະກຸ່ມຄວັນນັ້ນກໍແຕກແລ່ງອອກເປັນສອງສ່ຽງ. ບໍ່ຈັກວ່າຄົນ, ໄມ້, ຕັ່ງແລະສິ່ງຂອງສາລະພັດຢ່າງຟູອ່ານຢູ່ຕາມຫນ້ານ້ຳ. ໃຜໆກໍແຍ່ງຊີງກັນເກາະຂ້າງເຮືອພາຍເຫລັ້ມຕ່າງໆ, ເຂົາເຈົ້າຕີກັນເພື່ອຍຶດຈອງເອົາບ່ອນ. ຍ້ອນຕີກັນ, ດັ່ງນັ້ນ, ມີຫລາຍຄົນຈຶ່ງອ່ອນແຮງ ແລະຈົມນ້ຳໄປເລີຍ. ຂ້າພະເຈົ້າລອຍອອກໄປໄກໆ, ນອນຫງາຍຢູ່ເທິງຫນ້ານ້ຳແລະທັງວາງແຜນເອົາຕົວລອດ. ຖ້າບໍ່ຢ້ານປາສະຫລາມສັງເວີຍທັງເປັນແລ້ວ, ຂ້າພະເຈົ້າກໍອາດຈະລອຍອອມແຮງເຂົ້າຫາຝັ່ງໄດ້. ເປັນອັນວ່າ ຂ້າພະເຈົ້າເລີ່ມເບັດໄປໃສ່ທິດຕາເວັນຕົກ.

ນ້ຳທະເລຍຶ່ງໄດ້ຊູຂ້າພະເຈົ້າເຂົ້າສູ່ຝັ່ງແລະໂຍນຂ້າພະເຈົ້າຂຶ້ນສູ່ຫາດຊາຍແຫ່ງຫນຶ່ງ ທີ່ປົ່ງຕົບຕັນໄປດ້ວຍຕົ້ນຕະບອງເພດນ້ອຍໆເຊິ່ງຫ່າງຈາກ ຊານໂຕໂຣເຊີບໄມທະເລ, ຢູ່ໃກ້ກັບປາກອ່າວ ກາລິຟໍເນຍ.

ຊາວປະມົງຄົ້ນພົບຂ້າພະເຈົ້າຢູ່ແຫ່ງນັ້ນ. ເຂົາເຈົ້າໃຫ້ຂ້າພະເຈົ້າຮຳຕົວຢູ່ດ້ວຍແພໃບລົມ ແລະໃຫ້ນອນເຕັມອີ່ມ, ເຂົາເຈົ້າແບ່ງປັນຄາບເຂົ້າທີ່ທຳມະດາໆໃຫ້ຂ້າພະເຈົ້າແລະປະຕິເສດເງິນ ທີ່ຂ້າພະເຈົ້າມອບໃຫ້ແກ່ເຂົາເຈົ້າເພື່ອເປັນຄ່າຕອບແທນຕໍ່ການປະພຶດຕົວອັນດີງາມນັ້ນ.

ເຂົາເຈົ້າເວົ້າພາສາແອດສະປາຍ,   ແລະຂ້າພະເຈົ້າສາມາດເຂົ້າໃຈໄດ້ແຕ່ຄວາມໝອນັ້ນກໍຄື: "ມາຊາດລານ".

ໃນທີ່ສຸດ ຂ້າພະເຈົ້າຈຶ່ງຊວາດຮູ້ວ່າ ຢູ່ເທິງຝັ່ງກົງກັນຂ້າມນັ້ນຄື ມາຊາດລານ, ເປັນຕົວເມືອງແຫ່ງຫນຶ່ງຂອງ ແມັກຊິກ. ຂ້າພະເຈົ້າຕ້ອງສາບແຊ່ງຕົນເອງ ເພາະມີຄວາມຮັບຮູ້ທາງພູມມິສາດຫນ້ອຍເກີນໄປ. ຄວາມຈິງແລ້ວ ມາຊາດລານ ມັນຢູ່ ແມັກຊິກ ພຸ້ນ, ໃສຊິແມ່ນຢູ່ທະວີບ ໂອດສະຕຣາລີ. ຂ້າພະເຈົ້າຄິດເຖິງທ່ານ ໂຣບເຊີທັນທີ, ເພາະວ່າລາວພວມດຳລົງຊີວິດຢູ່ທີ່ ມາຊາດລານ. ບາງທີຂະນະນີ້ອາວຂອງລາວສາດສະດາຈານ ມິນໂຣຍເຊີ ກໍອາດຢູ່ຮ່ວມກັນໃນແຫ່ງນັ້ນດ້ວຍ, ເອົາລະ, ແນ່ນອນວ່າເຮົາຈະເລົ່າທຸກຢ່າງສູ່ສາດສະດາຈານຟັງດ້ວຍຕົນເອງ.

ຂ້າພະເຈົ້າຄຶດໆຝັນໆໄປເມື່ອເຫັນ ມາຊາດລານປະກົດເປັນພາບພໍຄິວນິວຢູ່ໄກໆ.

ກູ້າພົບທັງວານດິກນຳອີກເດລະ?   ຫມໍເຄີຍຄຶດມາແຕ່ດົນແລ້ວທີ່ຢາກຈະໄປຫາທ່ານໂຣບເຊີ... ເຖິງຈັ່ງໃດ ວານດິກ ກໍບໍ່ແມ່ນຄົນຂີ້ສູດປານໃດດອກ. ເຂົາຍອມຮັບໂທດແຕ່ພຽງຄົນດຽວ, ແລ້ວຍັງຮູ້ຈັດວາງແຜນໃຫ້ຂ້າພະເຈົ້າປົບໄປຈາກຮັງກູນຢ່າງທີ່ຂ້າພະເຈົ້າບໍ່ຕ້ອງເສຍເງິນພໍອັດເລີຍ. ພ້ອມກັນນັ້ນເຂົາຍັງຍອມຮັບຮູ້ບຸນຄຸນຂອງຂ້າພະເຈົ້ານຳອີກ, ຍ້ອນຂ້າພະເຈົ້າໄດ້ຊ່ວຍເຂົາລັກງູຢູ່ສວນອຸທິຍານນັ້ນ.

ຈັ່ງຊັ້ນແນ່ນອນວ່າ   ຢູ່ມາຊາດລານກໍຈະຕ້ອງມີຄົນທີ່ຈະຊົດຊ່ວຍຂ້າພະເຈົ້າ. ເວົ້າແທ້ແລ້ວ, ຈັກຈັ່ງໃດບຸ ຂ້າພະເຈົ້າຈຶ່ງຝາກຄວາມຫວັງໄວ້ກັບ ວານດິກກ່ວາໃຜທັງນັ້ນ. ຄົນອັນທະພານຫມໍນີ້ຈະອອກຮ່າງວາງແຜນທຸກຢ່າງໃຫ້ຂ້າພະເຈົ້າ. ເວົ້າແທ້ແລ້ວ ບໍລິສັດເຄື່ອງກະປ໋ອງສາມາດຕູ່ໂທດໃສ່ກະລາສີເຮືອທຸກຄົນໃນກຳປັ່ນ "ບຸກຊຸກ" ເພາະວ່າການທີ່ກຳປັ່ນຕຳມີນນັ້ນ ແມ່ນຍ້ອນຄວາມເຫງິກຫງາກຂອງເຂົາເຈົ້ານັ້ນເອງ.

ຊາຕາກຳຂອງຂ້າພະເຈົ້າໄດ້ກຳນົດໃຫ້ຊາວປະມົງກະວາກຕາໂຣ   ພ້ອມດ້ວຍລູກຊາຍທັງສາມຂອງລາວ ເອົາຂ້າພະເຈົ້າໂດຍສານໄປນຳເຮືອໃບລົມ "ເຣວິລີອາ" ເພື່ອໄປຍັງ ມາຊາດລານ.

## II

ດວງຕາເວັນແມັກຊີກຮ້ອນຈັດກະດັດກະດໍ້ ກ່ວາດວງອາທິດທີ່ຮັງກູນອີກ. ມັນເປັນຕາເວັນປະເພດຮ້ອນເຜົາໄຫມ້ກ່ວາເພິ່ນຫມົດໃນມວນຫມູ່ຕາເວັນທັງປວງ. ມັນແຜດເຜົາບັນດາສາຍພູ ຊີເອຣາມາແດຣຈິນວ່າອາຍຮ້ອນທີ່ພຸ່ງຂຶ້ນຈາກເຫົ່ານັ້ນກຸ້ມມາໃສ່ ມາຊາດລານ ຮ້າຍແຮງກ່ວາໃບພັດເຄື່ອງຈັກກຳປັ່ນ "ບຸກຊຸກ" ພົ່ນອາຍຮ້ອນອອກມາໃສ່ຄົນນັ້ນຕັ້ງຮ້ອຍຕັ້ງພັນເທົ່າບເອົາໂລດ.

ບັນດາເຮືອນຫລັງນ້ອຍທີ່ສ້າງດ້ວຍຫີນຂາວເຊີ່ງຫລົບລີ້ຢູ່ໃຕ້ຮົ່ມປ່າພ້າວ, ປ່າກ້ວຍແລະຕົ້ນຫມາກກ້ຽງນັ້ນ ຕິດຕໍ່ກັນເປັນແຖວຍາວຢຽດ ເບິ່ງເປັນພັກເປັນພັກຈາກແຄມອ່າວເຂົ້າສູ່ຕົວເມືອງ, ເບິ່ງແລ້ວຊ່າງງາມສະດຸດຕາດັ່ງຮູບແຕ້ມ. ຫນ້າທີ່ສະເພາະຫນ້າຂອງຂ້າພະເຈົ້າຄືຊອກຫາສາດສະດາຈານ ໂຣນເຊີ. ຂ້າພະເຈົ້າບໍ່ຮູ້ພາສາແອດສະປາຍພໍຄວາມເລີຍ. ເວົ້າແທ້ແລ້ວ ຂ້າພະເຈົ້າກໍພໍຈະສາມາດປາກພາສາລາແຕ່ງກັບພະຄຸນພໍ່ອົງໃດອົງຫນຶ່ງທີ່ສວມເສື້ອຄຸມດຳລ່ານ, ໃສ່ຫມວກໃບໃຫຍ່ ພວມຍ່າງເບິ່ງອາກາດຢູ່ຊາຍຝັ່ງທະເລນັ້ນໄດ້ຢູ່. ແຕ່ຂືນທຳໄປກໍພຽງແຕ່ຈະສ້າງຄວາມລຳຄານທີ່ບໍ່ຈຳເປັນໃຫ້ແກ່ຄົນສົນຈອນລ້າງ. ຂ້າພະເຈົ້າກໍບໍ່ກ້າຈະໄປກາມນັ້ນກາມນີ້ກັບພວກສາລະວັດເກົ້າຕົ້ນເປືອຍທີ່ພວມນັ່ງຫລັບຊຶມງຢູ່ກ້ອງຮົ່ມປ່າພ້າວຕາມທາງສີ່ແຍກນັ້ນ.

ຂ້າພະເຈົ້າແວ່ເຂົ້າຮ້ານດື່ມເຫົ່າຫນຶ່ງໄດ້ດື່ມນ້ຳຫວານແລະຊື້ຢາຊີກາກອກຫນຶ່ງ. ຂ້າພະເຈົ້າຈົກເອົາກະເປົານ້ອຍຫລາຍສີນັ້ນອອກມາແລ້ວຈ່າຍເງິນຫລຽນຫນຶ່ງ ໃຫ້ຍິງແມັກຊີກຕາດຳຄົນນັ້ນດ້ວຍເງິນທີ່ຂ້າພະເຈົ້າໄດ້ມາຈາກ ຕົນໂບຍ.

ຍິງຂາຍຂາງທັງຍິ້ມທັງເວົ້າແບບຊີໄມ້ຊີມື, ຂ້າພະເຈົ້າເຂົ້າໃຈວ່າ ນາງບໍ່ມີເງິນທອນ. ຂ້າພະເຈົ້າໂບກມືແລ້ວເວົ້າ:

- ບໍ່ເປັນຫຍັງດອກ, ຂ້ອຍຍັງຈະແວ່ເຂົ້າມາທີ່ຮ້ານຂອງເຈົ້າອີກຢູ່ດອກ. ບາດແລ້ວຄ່ອຍຄິດໄລ່ກັນ...

ໃນເຂດຊານເມືອງ ມາຊາດລານ ນີ້ ມີເຮືອນສອງຊັ້ນຫລັງຫນຶ່ງຊວນໃຫ້ຂ້າພະເຈົ້າມີຄວາມຕິດອົກຕິດໃຈຍິ່ງ. ມັນພຸ່ງພົ້ນຂຶ້ນມາທ່າມກາງທິວທັດຂອງສວນດອນຫນຶ່ງທີ່ອຸດົມໄປ

ດ້ວຍບຸບຜາຊາດ. ຂ້າພະເຈົ້າຢຸດຢູ່ຕໍ່ຫນ້າປະຕູໂຂງເຫລັກທີ່ສັບລາຍນູນຂອງສວນຕອນນັ້ນ ແລະລໍ່າແຍງດອກກຸຫລາບທີ່ງາມອາດເອ້ຫລູຫລານັ້ນຢູ່. ບັນດາຜ້າກັ້ງ ເຫລັກ ຢູ່ເທິງປະຕູ ປ່ອງຢ້ຽມນັ້ນລ້ວນແຕ່ປ່ອຍລົງມາອັດປ່ອງໄວ້ແຈບໆ. ບັງເອີນຫນຶ່ງໃນບັນດາ ຜ້າກັ້ງເຫລັກຂອງ ປ່ອງຢ້ຽມຊັ້ນຂອງນັ້ນກຶກຮໍາຂຶ້ນ. ທັນໃດນັ້ນກໍມີມືຂອງໃຜຜູ້ຫນຶ່ງໄຂປະຕູປ່ອງຢ້ຽມນັ້ນລະອອກ ແລ້ວສຽງທີ່ແສນຄຸ້ນເຄີຍຂອງວານດີກ ກໍຮ້ອງອອກມາໃສ່, ເອີ້ນຂ້າພະເຈົ້າເຂົ້າໄປດ້ວຍຄວາມ ກະຕືລືລົ້ນ:

- ພຸດໂທເອີຍ! ໂຕຫວະຫັ້ນ, ປິນທີ່ຮັກແພງ?

ແນ່ນອນແລ້ວວ່າຂ້າພະເຈົ້າກໍໄດ້ຕອບເຂົາຢ່າງຊົມຊື່ນ:

- ອ້າວ, ກໍເຮົາລະຕິ, ຊິແມ່ນໃຜອີກ. ວານດີກ ຫວະຫັ້ນ?

- ເຮົາເອງ! ເຂົ້າມາແມ້, ໄວໆແດ່, ທັບລັອກປະຕູຫັ້ນ. ຕາມສະບາຍໂລດ, ຢູ່ນີ້ບໍ່ມີ ຫມາ.

ເປັນທີ່ຈະແຈ້ງທີ່ສຸດວ່າ ວານດີກຫມາຍເຖິງເລື່ອງທີ່ເກີດຂຶ້ນຢູ່ຂ້າງປະຕູປ່ອງຢ້ຽມຫ້ອງ ເຮັດວຽກຂອງສາດສະດາຈານໃນເມື່ອກ່ອນນີ້. ຂ້າພະເຈົ້າກ້າວຜ່ານປະຕູສວນໄປດ້ວຍຄວາມ ຫມັ້ນໃຈ. ສຽງຂອງ ວານດີກດັງກ້ອງມາແຕ່ທາງໃນປະຕູປ່ອງຢ້ຽມວ່າ:

- ປິນ, ເຮົາພວມອາບນໍ້າເຢັນ. ໃນເມືອງບ້າອັນນີ້, ມັນຮ້ອນຈົນຊິຕາຍເອົາໂລດ. ເຈົ້າ ນາຍຂອງເຮົາໄປວຽກ, ອີກປະມານສອງມື້ຈຶ່ງຄ່ອຍຈະກັບ. ພວກເຮົາຕໍ່ແຮງໂອ້ລົມພົບເຕກັນ. ເຂົ້າເຮືອນດີໂຕເອີຍ, ຫ້ອງຂອງເຮົາຢູ່ເບື້ອງຊ້າຍຫັ້ນເດີ. ລໍຖ້າເຮົາຢູ່ຫັ້ນແລະເປັນກັນເອງຄື ກັບເຮືອນຂອງໂຕຫັ້ນເດີ, ເຮົາມໍ່ຊິແລ້ວໆ, ເຮົາຊິລົງໄປຫາດອກ. ແລ້ວໂຕຈຶ່ງອາບ.

ຂ້າພະເຈົ້າເຮັດຕາມຄໍາເວົ້າຂອງ ວານດີກ ທຸກຢ່າງ. ຂ້າພະເຈົ້າຊອກຫາຫ້ອງຂອງ ວານ ດີກ, ເຂົ້າຫ້ອງ ແລະເທິງຕົວຢູ່ເທິງຕັ່ງເທິງຫວາຍຢ່າງສະບາຍອາລົມ. ໃນເຮືອນງຽບສະຫງົບ ແລະເຢັນຊື່ນຊວນໃຫ້ຂ້າພະເຈົ້າຫລັບເຊືອບໄປຢ່າງບໍ່ຮູ້ເມື່ອຄືງ.

ມີໃຜຄົນຫນຶ່ງໄຂປະຕູຢູ່ດ້ານຫລັງຂອງຂ້າພະເຈົ້າຢ່າງລະມັດລະວັງ ແລ້ວຍ່າງເຂົ້າມາໃນ ຫ້ອງ.

- ດີໃຈທີ່ສຸດທີ່ໄດ້ພົບກັບເຈົ້າອີກ... - ຂ້າພະເຈົ້າອະລຳພະບົດຂຶ້ນ, ແຕ່ເມື່ອຫັນມາເບິ່ງມັນຊ້ຳບໍ່ແມ່ນ ວານດິກ.

ສາລະວັດຜູ້ຫນຶ່ງຈີ່ປາກປືນສັ້ນໃສ່ດັງຂອງຂ້າພະເຈົ້າໂລດ.

- ແມ່ນ, ດີນແລ້ວທີ່ມຶງບໍ່ໄດ້ພົບພວກກູ; ແລະກໍບໍ່ທັນໄດ້ດູດດົມຊົມກິ່ນດອກໂລຫະມາລານີ້ເທື່ອ.

ຍ້ອນວ່າຂ້າພະເຈົ້າຄຶດບໍ່ເຖິງວ່າເຫດການຈະເປັນໄປໃນທຳນອງນີ້, ຂ້າພະເຈົ້າຈຶ່ງສະເດີດຕື່ນຈົນຫງາຍຫລັງເຮັດຂາຊີ້ຟ້າເກົ່ເດ່. ສາລະວັດຍິງໂປ້ງຂຶ້ນນັດຫນຶ່ງ. ກະສຸນດອນກັບວັດຖຸໃດວັດຖຸຫນຶ່ງທີ່ເປັນແກ້ວບໍລິສຸດ. ເສດແຕກຂອງມັນຟົ້ງກະຈາຍໄປທົ່ວສາລະທິດ. ພວກສາລະວັດທີ່ນຸ່ງເຄື່ອງແບບເຄິ່ງພົນລະເຮືອນນັ້ນ ຈັບແຂນຂ້າພະເຈົ້າບິດໄປທາງຫລັງ ແລະບີບບ້ອງຄໍດ້ານຫນ້າຂອງຂ້າພະເຈົ້າໄວ້.

- ໃສ່ກັບມືບັກໂຈນນີ້ໄວ້! - ຜູ້ບັນຊາອອກຄຳສັ່ງ. ພວກມັນໃສ່ກະແຈກັບມືແລະຊຸກຂ້າພະເຈົ້າຈົນລົ້ມຟຸບລົງກັບພື້ນຫ້ອງ.

ຂ້າພະເຈົ້າບໍ່ມີຫຍັງເສຍດາຍອີກແລ້ວ ນອກຈາກຊີວິດ, ດ້ວຍເຫດນັ້ນ ຈຶ່ງຮ້ອງແຜດຂຶ້ນ:

- ພວກສູເຮັດຫຍັງແບບນີ້, ພວກຮ່າກິນຫົວສູເອີຍ? ເມືອງນີ້ເຂົາຕ້ອນຮັບນັກທ່ອງທ່ຽວແບບນີ້ຫວະ?

ກຳປັ້ນມັດຫນຶ່ງແດກມາທີ່ຄາງກະໄຕແລະຕັດໂວຫານການທູດທີ່ຂ້າພະເຈົ້າ ຫາກໍເອີ່ຍຂຶ້ນນັ້ນໄປ. ພຽງແຕ່ໃຊ້ປາຍລີ້ນເຕາະໆ, ຂ້າພະເຈົ້າກໍຮູ້ໄດ້ທັນທີໂລດວ່າແຂ້ວຂອງຕົນເຫລັ້ມຫນຶ່ງຄອນເຫລາະແຫລະໄປສາແລ້ວ. ພວກເຂົາກະຊາກຂ້າພະເຈົ້າໃຫ້ຍືນຂຶ້ນຢູ່ກາງຫ້ອງ. ຜູ້ບັນຊາຂອງເຂົານັ່ງຂຶງແຂ້ຢູ່ເທິງຕັ່ງເທົ້າ.

- ກາກເບໂຣ ມຶງຫລອຍເຂົ້າມານີ້ແບບໃດ? - ຜູ້ບັນຊາການຖາມດ້ວຍສຽງທີ່ຄ່ຽມຄົມທີ່ສຸດ. ພ້ອມກັນນັ້ນ ຂ້າພະເຈົ້າກໍໄດ້ຍິນສຽງປືນດັງຂຶ້ນອີກນັດຫນຶ່ງຢູ່ເບື້ອງຫລັງຂອງຕົນ, ພາໃຫ້ຂ້າພະເຈົ້າຕ້ອງເສືອກຕາແນມຂຶ້ນເບິ່ງເພດານ.

- ພວກທ່ານເອີຍ, ຖ້າວ່າຂ້ອຍຫາກຫູຫນວກຕັນປຶກໄປທັງສອງກ້ຳແລ້ວ ເຮັດແນວໃດ

ຈຶ່ງຈະສາມາດຟັງຄຳການຂອງພວກທ່ານໄດ້ຢ່າງຈັດເຈນ. - ຂ້າພະເຈົ້າເວົ້າແບບຊີ້ເຫດຊີ້ຜົນ ແຕ່ກໍຕຽມລໍຖ້າຟັງນັດທີ່ສອງທີ່ມໍ່ຈະດັງຂຶ້ນຢູ່ໃກ້ໆຫູກ້ຳຂວານັ້ນອີກ.

- ບັກໂຈນ, ຕອບມາສາ, ມຶງເຂົ້າມານີ້ໄດ້ດ້ວຍວິທີໃດ. - ສຽງອັນນຸ່ມນວນນັ້ນດັງຂຶ້ນອີກຄັ້ງຫນຶ່ງ. ແລະຂ້າພະເຈົ້າຕວງໄວ້ບໍ່ຜິດ: ລູກປືນບາດຕໍ່ມາກໍດັງໂປ້ງຂຶ້ນທີ່ຂ້າງກ້ຳຂວາ.

ຄວາມຄຽດແຄ້ນຈົນບ້າບ່ວງຍິ່ງກ້ວມລົ້ນຫົວໃຈຂອງຂ້າພະເຈົ້າ ຄືກັບນ້ຳບາລອດແລ່ນພຸ່ງຂຶ້ນສູງເມື່ອເຮົານຳເອົາມັນອອກໄປຕາກແດດ.

- ຍິງໂລດໂຄດພໍ່ສູ, ຊິຍິງຮອດຮ້ອຍນັດກູກໍບໍ່ຢ້ານ! - ຂ້າພະເຈົ້າດ່າພວກເຂົາຕາມແບບທີ່ຕີນໂບຍເຄີຍໃຊ້. - ກູມັກທີ່ສຸດການທຳຄວາມລຶ້ງເຄີຍແບບພວກສູນີ້. ຈົ່ງນຳຕົວກູໄປຫາທ່ານຫົວຫນ້າກົງສູນ...

ພວກສາລະວັດຫົວຮາຂຶ້ນ.

- ຕີສີຫນ້າໄດ້ດີເວີຍ!

ຫມໍ່ຫົວຫນ້າສາລະວັດພູດລຸກຂຶ້ນມາຢືນຢູ່ຕໍ່ຫນ້າຂ້າພະເຈົ້າ, ແລ້ວເວົ້າວ່າ:

- ຟັງເດີ, ກູຫົວຫນ້າສາລະວັດ ເປໂດຣມູຣານເບັກ ແດັນອາໂຣນໂຍ ຂໍສັ່ງຈັບມຶງ, ບັກໂຈນກາກເບໂຮ, ມຶງຍັງແມ່ນຄົນໆດຽວກັນ ກັບ ດິກອານວາເຣັດ, ແລະນິກຕີນໂບຍອີກ, ມຶງມີໂທດລົ້ນຟ້າເຫລືອແຜ່ນດິນ, ປຸ້ນສະດົມແລະຂ້າຄົນ, ໂທດສຸດທ້າຍໃນຈຳນວນໂທດກຳດັ່ງກ່າວແມ່ນຄະດີຄາດຕະກຳສາດສະດາຈານ ໂຫມັດໂຮນເຊີ ຢູ່ໃນເຮືອນຂອງເພິ່ນເອງ, ບ່ອນເຊິ່ງມຶງພວມຖືກຈັບກຸມຢູ່ໃນປະຈຸບັນນີ້. ກວດຕົວມັນ!

ຖ້າເຂົາເຈົ້າຫາກຈັບຂ້າພະເຈົ້າຈຸ່ມລົງຫມໍ້ນ້ຳພິດ ແລ້ວເອົາມາຈຸ່ມນ້ຳເຢັນແລະເຮັດຈັ່ງຊັ້ນຫລໍາໄປຫລໍາມາຫລາຍເທື່ອແລ້ວ, ການກະທຳດັ່ງກ່າວກໍຍັງຈະບໍ່ເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນເທົ່າກັບຂ່າວກ່ຽວກັບຄະດີຄາດຕະກຳ ທ່ານໂຮນເຊີ.

- ແຕ່ຂ້ອຍບໍ່ເຄີຍຮູ້ຫນ້າກັບບັກ ກາກເບໂຮ ໃດໆທັງນັ້ນ...ຂ້ອຍຄື ເຊມຸຍແອນປິນ, - ຂ້າພະເຈົ້າເວົ້າພຸມໆ, ເອິງອະງຢ້ອນຂ່າວສົດໆຮ້ອນໆນີ້. - ແມ່ນຢູ່ວ່າ, ຂ້ອຍຮູ້ຈັກ ຕີນໂບຍດີ...

- ຫຸບປາກໄວ້, ບັກຊົ່ວ, ບໍ່ຊັ້ນກູຊິອອກຄຳສັ່ງໃຫ້ຊອມມຶງໃດ. - ຜູ້ບັນຊາການເວົ້າ

ຄ່ອຍໆ. - ເຄື່ອງທີ່ມຶງນຸ່ງຢູ່ຫັ້ນແມ່ນເຄື່ອງນຸ່ງຂອງກາກເນໂຣ. ນີ້, ກະເປົານ້ອຍຫລາຍສີຂອງມັນເຊື່ອງສາຍລັບທຸກຄົນ ແຕ່ ແອັນປາໂຢ ເກີງ ໂດສະເດໂຣ ລ້ວນແຕ່ຮູ້ດີ. ປານນັ້ນມຶງຍັງກ້າປະຕິເສດຊັ້ນຫວະ?

- ໂທເອີຍ! ເປັນໄປໄດ້ບໍ່ວ່າທ່ານ ໂຣນເຊີຫລານຂອງສາດສະດາຈານ ມິນໂຣຍເຊີ, ກືກຂ້າຕາຍແລ້ວ? - ຂ້າພະເຈົ້າພຶມພຳ, ລ່ອຍເພຍໄປຫມົດທັງຄືງເພາະຄວາມສະຍົດສະຫຍອງ.

ພວກເຂົານຳຕົວຂ້າພະເຈົ້າອອກໄປ, ແຕ່ຂ້າພະເຈົ້າຍັງໄດ້ຍິນສຽງເວົ້າຕິດຕາມມານຳຫລັງວ່າ:

- ບັກຄາດຕະກອນ, ໃນບໍ່ຊ້າ ມຶງກໍຈະໄດ້ເຫັນແຈ້ງທຸກຢ່າງ.

## III

ຫ້ອງຂອງສາດສະດາຈານ ໂຣນເຊີ, ຊຶ່ງເປັນສະຖານທີ່ເກີດເຫດໄດ້ເຮັດໃຫ້ຂ້າພະເຈົ້າຫວາດຫວັ່ນສັ່ນເຊັນຂຶ້ນ. ເລືອດທີ່ບໍ່ທັນກ້າມຕົກເຮ່ຍຮວາຍໄປທົ່ວພື້ນເຮືອນ, ເລືອດພົ້ງຂຶ້ນຮອດຝາເຮືອນ. ການຕໍ່ສູ້ກັນຢ່າງດຸເດືອດເກີດຂຶ້ນລະຫວ່າງ ໂຣນເຊີ ແລະຄາດຕະກອນ. ຕັ່ງອີ້, ລີ້ນຊັກຕ່າງໆທີ່ໃຊ້ສຳລັບໃສ່ຈອກແລະກາ, ໂຕະບັນຈຸປຶ້ມ - ທຸກສິ່ງທຸກຢ່າງລ້ວນແຕ່ຕົກຂວ້ຳສະຫລັກຫັກພັງກອງເກັນຢູ່ທັງນັ້ນ. ກະໂຖໃສ່ນ້ຳກິ້ງໄປຕາມພື້ນເຮືອນ, ຝາກືກດັນອອກ ແລະນ້ຳຂ້ອນອອກເຄິ່ງຫນຶ່ງ. ບົນຢູ່ກັບບວກນ້ຳນັ້ນແມ່ນໂມງປຸກທີ່ເຮັດດ້ວຍທອງແດງແລະເສດແກ້ວແຕກ. ຂ້າພະເຈົ້າເຫັນຄ້ອນຕີດວງຫນຶ່ງອາບດ້ວຍເລືອດແລະມີດແກຸຫນວດຄົມໆບາງໆດວງຫນຶ່ງວາງໄວ້ເທິງຂອບປ່ອງຢ້ຽມ.

- ກູຈະເລົ່າຄືນໃຫ້ມຶງຟັງວ່າ ພຶດຕິກຳອັນໂຫດຫ້ຽມນັ້ນໄດ້ເກີດຂຶ້ນຢູ່ນີ້ແບບໃດ, - ແດັນອາໂຣນໂຍເວົ້າກັບຂ້າພະເຈົ້າອຸ່ມໆ. - ແລະມຶງກໍມີແຕ່ພາລະອັນດຽວຄືຮັບຮອງວ່າກູເວົ້າຖືກທໍ່ນັ້ນ. - ສາດສະດາຈານນັ່ງອ່ານປຶ້ມຢູ່ຕໍ່ຫນ້າໂຕະນ້ອຍນີ້. ມຶງຫລອຍເຂົ້າມາທາງຫລັງແລະເອົາຄ້ອນຕີທຸບຫົວເພິ່ນ, ແຕ່ມຶງຄາດຄະເນບໍ່ໄດ້ວ່າ ທ່ານ ໂຣນເຊີແຂງແຮງກວ່າມຶງ. ເພິ່ນຄຸບມຶງ, ມຶງກໍເລີຍເອົາຄ້ອນຕີທຸບເພິ່ນອີກບາດຫນຶ່ງ, ເພິ່ນປ່ອຍມຶງແລ້ວບີບຫມີ, ສ່ວນມຶງແລ່ນໄລ່ທຸບຕີຕໍ່ໄປ. ແລະນີ້, ມີດແກຸດວງນີ້ໄດ້ຢຸດຕິເຫດການທຸກຢ່າງລົງໄປ...

ຂ້າພະເຈົ້າເວົ້າ:

- ຈົ່ງໃຫ້ຂ້າພະເຈົ້າເບິ່ງສົບສາດສະດາຈານໂຣນເຊີຜູ້ເຄາະຮ້າຍນັ້ນແດ່.

- ບະ! ບະ! ບ່າ! ເກັ່ງເວີຍ! - ແດັນອາໂຣນໂຍກັດແຂ້ວກາດໆ. - ແຕ່ເຖິງຈັ່ງໃດກໍເປັນສັນດານຂອງມຶງ, ຂ້າຄິນແລ້ວກົ້ມລົງນ້ຳເພື່ອອຳເງື່ອນ. ໄປ ຈູງບັກຊົ່ວນີ້ໄປ!

ພວກຂ້າພະເຈົ້າລົງໄປຊັ້ນລຸ່ມຕາມຂັ້ນໄດແຄບອັນໜຶ່ງຢູ່ດ້ານຫລັງ, ເທິງລູກຂັ້ນໄດຕ່າງໆ ຍັງເຫັນບັນດາຢອດເລືອດໄດ້ຢ່າງຊັດເຈນ.

- ຫັ້ນ, ມຶງເອງລາກຊາກສົບຂອງທ່ານ ໂຣນເຊີຜ່ານໄປນີ້, - ແດັນອາໂຣນໂຍ ເວົ້າ, ຊຸກຂ້າພະເຈົ້າລົງລຸ່ມແລະບໍ່ປ່ອຍໃຫ້ຂ້າພະເຈົ້າໄດ້ຄຶດຄົ້ນຫຍັງເລີຍ. - ມຶງຢຸດພັກຢູ່ປາກປະຕູ ຍ້ອນວຽກງານອັນໜັກໜ່ວງນີ້ແລະ...

ແດັນອາໂຣນໂຍ ໄຂລະປະເຂົ້າສວນອັນງົດງາມຂອງເຂດອາກາດຮ້ອນນັ້ນອອກ. ຕົ້ນໄມ້ ໃບຫຍ້າພວມຈໍ່ດອກອອກໃບແລະສົ່ງກິ່ນຫອມກຸບກຸ້ມ. ໜ້າອະເຫຍືອງຄຶງທີ່ສຸດ ເມື່ອຄຶດ ເຖິງໂຫດກຳອັນສະຍົດສະຫຍອງຢ່າງໜຶ່ງຖືກປະຕິບັດຂຶ້ນໃນສະຫວັນວິມານແຫ່ງນີ້.

ບົນເສັ້ນທາງນ້ອຍທີ່ປູດົນຊາຍທະເລແລະເປືອກຫອຍກີບກ້ວງນັ້ນ ຍັງສາມາດແນມເຫັນ ຮ່ອງຮອຍຕ່າງໆເຊິ່ງຄາດຕະກອນໄດ້ປະໄວ້ໃນຂະນະທີ່ລາກຊາກສົບຂອງ ໂຣນເຊີ ຜ່ານໄປຢ່າງ ຈະແຈ້ງ.

- ໂຫເອີຍ! - ແດັນອາໂຣນໂຍຫລຸດປາກອອກມາຢ່າງຊື່ນຊົມແລະກົ້ມເກັບກະດຸມຂາວ ໜ່ວຍໜຶ່ງທີ່ເຮັດດ້ວຍເປືອກຫອຍມຸກຊະນິດໜຶ່ງ. - ນີ້ເປັນຫລັກຖານຢືນຢັນທີ່ມີກົນໄປ ອີກຢ່າງໜຶ່ງ. ບັດນີ້ຈຶ່ງຮູ້ວ່າຢູ່ຕາມຂັ້ນໄດນັ້ນເປັນຫຍັງພວກເຮົາຈຶ່ງເຫັນຄາບເລືອດນ້ອຍ ດຽວ, ສ່ວນຢູ່ນີ້ຊ້ຳບໍ່ເຫັນຈັກໜ້ອຍເລີຍ. ມຶງປ່ອຍໃຫ້ເລືອດໄຫລອອກຈາກຊາກສົບຈົນ ໝົດ ຢູ່ໃນຫ້ອງພຸ້ນເສຍກ່ອນ ແລ້ວຈຶ່ງເອົາເສື້ອຄຸມຂາວຫໍ່, ບາງທີຊາກສົບນັ້ນອາດຈະຫໍ່ ດ້ວຍເສື້ອເຖິງສອງສາມຜືນ, ແລ້ວມຶງກໍແກ່ລາກມາຕາມທາງເສັ້ນນີ້.

ນັ້ນແມ່ນເຫດການອັນສະຍົດສະຫຍອງທີ່ສຸດ ເຊິ່ງບໍ່ມີການພົວພັນຫຍັງກັບຂ້າພະເຈົ້າ ເລີຍ. ຄວາມສະດຸດໃຈເບື້ອງຕົ້ນຂອງລາງຝັນຮ້າຍນີ້ໄດ້ງຽບລົງໄປແລະຂ້າພະເຈົ້າກໍເລີ່ມຕັ້ງສະ ຕິທີ່ເຄີຍມີມານັ້ນຄືນ. ຂ້າພະເຈົ້າຖາມຂຶ້ນວ່າ:

- ຮຽນທ່ານຫົວໜ້າສາລະວັດ, ຄົນຊັ້ນຄາດຕະກອນແລ່ນໄປທິດໃດ?

- ຟ້າວກ່ອນ, ກາກເບໂຣ, - ແດັນອາໂຣນໂຍ ຕອບດ້ວຍສຽງຄ່ອຍໆ.

ຈາກເສັ້ນທາງໃຫຍ່, ມີທາງນ້ອຍເສັ້ນໜຶ່ງເບັ່ງໄປສູ່ປາກເຫວທີ່ມີຜາຊັນຄືໜ້າຜາກ. ຢູ່ເບື້ອງລຸ່ມມີຟອງນ້ຳກະທົບຫົ້ມຽູ່.

- ຢູ່ນີ້ຈະຕ້ອງເລີກເກືອງເກົ້າສິບຟຸດແລະພວກລູກປາສະຫລາມມັກບ່ອນນີ້ຫລາຍ, - ແດັນອາໂຣນໂຍເວົ້າກັບຂ້າພະເຈົ້າແບບໃຊ້ຄວາມຄິດ. - ຈົ່ງກົ້ມຫົວໄຫວ້ອາໄລຕໍ່ໜ້ານິພານສະຖານຊື່ວນິດນີລັນຂອງຜູ້ທີ່ມຶງຂ້າ ແລ້ວໄປເຂົ້າຄຸກ. ຢູ່ບ່ອນນັ້ນ ມຶງຈະມີເວລາພຽງໜ້ອຍດຽວເພື່ອອະທິຖານໃຫ້ພະຜູ້ເປັນເຈົ້າຊ່ວຍຊູເອົາວິນຍານທີ່ບາບໜາສາໂຫດຂອງມຶງໄວ້.

ຂ້າພະເຈົ້າເວົ້າຢ່າງເຄັ່ງຂຶມ:

- ຮຽນທ່ານ, ຂໍເວລານຳທ່ານໜຶ່ງນາທີ. ນີ້ມັນເປັນຄວາມເຂົ້າໃຈຜິດແລະຜິດພາດທີ່ສຸດ. ຂ້າພະເຈົ້າແມ່ນ ເຊມຸຍແອນບີນ, ກຳມະກອນດູແລກະຖົງປາຜູ້ໜຶ່ງຢູ່ໃນກຳປັ່ນ "ບຸກຊຸກ" ທີ່ຈອດຢູ່ໃກ້ແຫລມພະລູກາກ່ອນນີ້ສາມມື້...

- ຄັກຫລາຍ, ເວົ້າຕໍ່ໄປ. - ແດັນອາໂຣນໂຍຫົວເຍີ້ຍ.

- ຂ້າພະເຈົ້າມານີ້ເພື່ອຊອກຫາຄົນໃຊ້ຂອງສາດສະດາຈານ ໂຣນເຊີ ຄື ວານດິກ, ເພື່ອນເກົ່າຂອງຂ້າພະເຈົ້າ.

- ສ່ວນກະໂຕຂອງທ່ານ ໂຣນເຊີ ນັ້ນ ມຶງບໍ່ໄດ້ສົນໃຈແມ່ນບໍ? - ແດັນອາໂຣນໂຍຖາມ.

- ສົນໃຈ, ຂ້າພະເຈົ້າມີຄວາມສົນໃຈ.

- ພຸດໂທເອີຍ, ນີ້ເປັນຄັ້ງທຳອິດທີ່ມຶງເວົ້າຄວາມຈິງ. ຍ້ອນເຫດນີ້ ບັນດາເທວະໂລກທັງຫລາຍຈະອະໄພໃຫ້ມຶງໜຶ່ງສ່ວນຮ້ອຍໃນຈຳນວນໂທດກຳທັງໝົດຂອງມຶງ. ແຕ່ເກົ້າສິບເກົ້າສ່ວນຮ້ອຍທີ່ຍັງເຫລືອຢູ່ນັ້ນກໍພໍແລ້ວທີ່ຈະທໍລະມານມຶງຢູ່ໃຕ້ພື້ນນາຮົກຈົນເກືອງມື້ມຶງ ວອດວາຍສະຫລາຍຊີບ. ແລ້ວມຶງຍັງແກ້ງດີວະບໍ່ຈັກຫຍັງຕໍ່ຫຍັງກ່ຽວກັບຄົນໃຊ້ຂອງເພິ່ນອີກ? ແມ່ນມຶງເອງທີ່ເປັນຂ້ອຍຂ້າຂອງທ່ານສາດສະດາຈານ... ສ່ວນມຶງຈະຊື່ວ່າຈັ່ງໃດກໍບໍ່ສຳຄັນດອກ...

- ເອີລະຈະວ່າຈັ່ງຊັ້ນກໍໄດ້!... ຂ້າພະເຈົ້າແຜດສຽງຂຶ້ນແລ້ວຫຸບປາກໄວ້. ຈະເລົ່າເຫດ

ການຕ່າງໆ ທີ່ພາໃຫ້ຂ້າພະເຈົ້າມາເກີງສະການທີ່ມີຄະດີຄາດຕະກຳອັນຫນ້າອາຫນາດນີ້ສູ່ສາລະວັດຜູ້ນີ້ຟັງຕັ້ງແຕ່ຕົ້ນຈົນຮອດປາຍນັ້ນ ກໍຈະເປັນເລື່ອງໄຮ້ປະໂຫຍດຊື່ໆ. - ທ່ານເອີຍ, ທ່ານຫາລະນຳຕົວຂ້າພະເຈົ້າໄປເຂົ້າຄຸກ. - ໃນທີ່ສຸດກໍຫລຸດປາກອອກມາ, - ແລະຈົ່ງຮີບລາຍງານໃຫ້ທ່ານຫົວຫນ້າກົງສຸນຮັບຊາບ. ຂ້າພະເຈົ້າຕ້ອງການພົບພໍ້ເພິ່ນ.

- ແນ່ນອນວ່າກູຈະລາຍງານໃຫ້ທ່ານຫົວຫນ້າກົງສຸນຮັບຊາບ. - ແດັນອາໂຮນໂຍເຫັນດີ. - ຕາມຄວາມເຫັນຂອງກູແລ້ວ ເຫັນວ່າຄວນແຂວນຄໍມຶງດ້ວຍເຊືອກຍາວໆເສັ້ນຫນຶ່ງແລ້ວຢ່ອນລົງໃນເຫວນີ້. ແຕ່ນັ້ນມັນເປັນພຽງແຕ່ແບບລົງໂທດທີ່ເບົາບາງທີ່ສຸດ ກ້າທຽບໃສ່ໂທດກຳທັງຫມົດຂອງມຶງ. ໄປ! ເອົາມັນໄປ!

ພວກສາລະວັດອ້ອມເອົາຂ້າພະເຈົ້າ, ຫ້າງປືນແລ້ວນຳຕົວຂ້າພະເຈົ້າໄປຍັງເຮືອນຈຳ.

## IV

ຂ້າພະເຈົ້າດຳລົງຊີວິດຢູ່ໃນຮັງຫນູອັນປຽກເປື້ອນເຊິ່ງສ້າງຂຶ້ນດ້ວຍຫີນ; ບ່ອນເຊິ່ງເຂົາເຈົ້າຍັດຫົວຂ້າພະເຈົ້າເຂົ້າໄປນັ້ນເປັນເວລາສອງມື້ແລ້ວ. ເຂົາເຈົ້າໃຫ້ຂ້າພະເຈົ້າກິນເຂົ້າປຽກແຫລວໆຊະນິດຫນຶ່ງເຊິ່ງມີຫມາກກໍ່ວຢູ່ພໍເປັນຮີດແລະມີເສດກະດູກຫລ້ອນ ຂອງສັດຊະນິດຫນຶ່ງ ເຊິ່ງຄາວຍັງເປັນສັດນີ້ມີທັງເກັດແລະມີທັງຂົນອ່ອນ. ພວກຜູ້ເຖົ້າທີ່ນອນຢູ່ເທິງກອງເຟືອງໃກ້ງນັ້ນ ໄດ້ແຕ່ໂມໂຫໂຫໂສຢູ່ຕະຫລອດ, ສາບແຊ່ງທຸກຢ່າງບໍ່ວ່າຈະເປັນເລື່ອງມະຫລືດປົດປີ່ໃດໆ. ເຂົາເຈົ້າເຮັດໃຫ້ຂ້າພະເຈົ້າບໍ່ສາມາດຈະລວບລວມຄວາມນຶກຄິດຫຍັງໄດ້, ຈົນຂ້າພະເຈົ້າບ່ວງບ້າຂຶ້ນແລະຮ້ອງໃສ່ຫນ້າເຂົາເຈົ້າ. ແຕ່ກໍເປັນຫນ້າແປກແທ້ໆ, ບໍ່ຄຶດເລີຍວ່າຫລັງຈາກນັ້ນເຂົາເຈົ້າກໍຫຸບປາກມິດອິ່ມສົມປານແປັນອັດປາກ.

ມື້ທີ່ສາມ ເຂົາເຈົ້າໄດ້ນຳຂ້າພະເຈົ້າໄປຫາ ແດັນອາໂຮນໂຍ, ຊຶ່ງຜູ້ກ່ງວພວມນັ່ງເຮັດວຽກຢູ່ໃນຫ້ອງທີ່ແຈ້ງສະຫວ່າງໄປດ້ວຍແສງແດດ. ຊາຍຮ່າງສູງຜູ້ຫນຶ່ງຍືນສູບກອກຢູ່ໃກ້ກັບປະຕູບ່ອງຍັງມ. ພາຍໃນຫ້ອງຮຸ່ງແຈ້ງໂພດຈົນພາໃຫ້ຂ້າພະເຈົ້າຕ້ອງໄດ້ຫົບຕາເຂົ້າ.

ຂ້າພະເຈົ້າໄດ້ງິນແດັນອາໂຮນໂຍ ເວົ້າຂຶ້ນວ່າ:

- ມັນນີ້ແຫລະ, ທ່ານ ໂຣບິນເຊິນ. ຢືນຢູ່ຕໍ່ຫນ້າຂອງທ່ານຄືບັກ ກາກເນໂຣທີ່ລືຊື່, ພິດ

ຄືກຳອັບໂຫດຫ້ຽມຂອງມັນກ້ອງສະນັ່ນໄປທົ່ວສາລະຫົດ, ແຕ່ແຫລມ ກອັກເນີ ເຖິງ ອາລີອາສະກາ. ມັນນໍ່ຈະເຮັດຄືບໍ່ຮູ້ພາສາ ແອັດສະປາຍພໍຄວາມອີກແລ້ວ.

- ຂ້າພະເຈົ້າຮູ້ພາສາຈີນແລະພາສາອິນເດຍ, - ຂ້າພະເຈົ້າມືນຕາຂຶ້ນແລ້ວເວົ້າ. ຂ້າພະເຈົ້າຫັນໄປທາງຊາຍຮ່າງສູງນັ້ນ ແລະກົ້ມຫົວຄຳນັບ: ຂໍຣງນ, ທ່ານເປັນກົງສູນແມ່ນບໍ່?

- ແມ່ນແລ້ວ, ຂ້ອຍເອງ, - ທ່ານ ໂຣບິນເຊີນ ຕອບຢ່າງແຂງກະດ້າງ. - ທາງທີ່ດີເຈົ້າຄວນຈະເລົ່າຄືນເຖິງບັນດາເຫດການທີ່ເກີດຂຶ້ນນັ້ນຢ່າງຫຍໍ້ໆ, ໄດ້ບໍ່ລະ? ນັ່ງລົງ ແລ້ວຈຶ່ງເລົ່າເລື່ອງລາວດ້ວຍຄວາມທຸບທ່ຽງ...

- ຂໍຂອບໃຈທ່ານ, - ຂ້າພະເຈົ້າກົ້ມຫົວຄຳນັບອີກເທື່ອໜຶ່ງ, ແລ້ວນັ່ງລົງເທິງຕັ່ງອີ້ຫລອງນວມເຟືອງນັ້ນ.

ຂ້າພະເຈົ້າເລີ່ມເລື່ອງຈາກຄາວມາເຖິງການກຸດດາ, ຂ້າພະເຈົ້າວາດພາບເຖິງອຸທິຍານງູ, ພະຍຸກາລະໂລກ ທີ່ນາປູຄາດ, ການຂຶ້ນສານ ແລະເມື່ອເລົ່າເຖິງຕາງົວເຖິກແລ້ວປະກົດວ່າຄຳຂອງຂ້າພະເຈົ້າກໍແຫ້ງແຫບລົງໄປ. ແດັນອາໂຣນໂຍ ຈຶ່ງເວົ້າຕື່ມວ່າ:

- ເລົ່າໃຫ້ໝົດແມ້, ກາກເນໂຣ.

ຂ້າພະເຈົ້າງຽບຢູ່. ທ່ານ ໂຣບິນເຊີນ ຈ້ອງເບິ່ງຂ້າພະເຈົ້າ.

- ເລົ່າຕໍ່ໄປເບິ່ງ...ເຈົ້າເຮັດຫຍັງແດ່ຢູ່ ອາພະລິກກາ?

ແຕ່ ແດັນອາໂຣນໂຍ ສູບຊີກາຢູ່ຢ່າງຄົ້ນຄິດແລະຕອບແທນ:

- ມັນບໍ່ຫ່ອນໃຫ້ທ່ານຕ້ອງລໍຄົນດອກ, ແລ້ວມັນຈະເລົ່າເລື່ອງໃດເລື່ອງໜຶ່ງ ເຊິ່ງຊວນໃຫ້ທ່ານຕ້ອງຕຽມພ້ອມແກ້ກັບມືໃຫ້ມັນ. ແຕ່, ທ່ານ ໂຣບິນເຊີນ, ທ່ານຢ່າໄດ້ໄວ້ໃຈໃນຄຳເວົ້ານ້ຳອ້ອຍນ້ຳຕານຂອງມັນເລີຍ. ມັນຮູ້ສະກົດຈິດ ແລະກໍຫລົບໜີອອກຈາກຫ້ອງຂັງດ່ຽວທີ່ມີທະຫານຍາມຕັ້ງສາມຄົນນັ້ນໄປໄດ້ຫ້າຄັ້ງແລ້ວ, ກ່ອນມື້ທີ່ມັນຈະຖືກນຳຕົວໄປປະຫານ.

- ໄດ້ລົມກັບຄົນທີ່ໜ້າສົນໃຈແບບນັ້ນກໍຍິ່ງດີກາລະບໍ່, - ໂຣບິນເຊີນ ເວົ້າ, ແລ້ວຫັນມາຫາຂ້າພະເຈົ້າ: - ເຂົາເຈົ້າພູກໂທດເຈົ້າວ່າໄດ້ຂ້າພົນລະເມືອງອະເມລິກາຜູ້ໜຶ່ງຄືສາດສະດາຈານໂທມັດໂຣນເຊີ. ເຈົ້າໄດ້ຂໍມາເປັນຂ້າລ່ວງໃຊ້ຂອງເພິ່ນຜູ້ນັ້ນໂດຍໃສ່ຊື່ປອມ. ເຂົາເຈົ້າຈັບເຈົ້າໄດ້ຢູ່ບ່ອນເກີດເຫດ ...

- ເອົາລະ, ສໍ່ານີ້ກໍພໍແລ້ວ, ທ່ານ ໂຣບິນເຊີນ! - ແດັນອາໂຣນໂຢ ແຜດຂຶ້ນດ້ວຍຄວາມໂມໂຫ. - ຈົ່ງປ່ອຍມັນໄວ້ໃຫ້ເປັນພາລະຂອງພວກຂ້າພະເຈົ້າ, ແລ້ວມັນຈະຖືກລົງໂທດຢ່າງເຫມາະສົມກັບໂທດຂອງມັນ.

- ບໍ່, ອາໂຣນໂຢ ທີ່ຮັກແພງ, - ທ່ານໂຣບິນເຊີນ ຕອບຢ່າງຫຸ່ນຫ່ຽງ. - ເພື່ອຄວາມເປັນທຳອັນສູງສົ່ງ ລາວສົມຄວນໄດ້ຮັບການດຳເນີນຄະດີຕາມກົດຫມາຍໃນປະເທດຂອງພວກຂ້າພະເຈົ້າ...

ຂ້າພະເຈົ້າຖືວ່າຕົນອາດຈະສາມາດເວົ້າສອດເຂົ້າໄປໄດ້.

- ຮຽນທ່ານ ໂຣບິນເຊີນ, ສະພາບຂອງຂ້າພະເຈົ້າໃນປະຈຸບັນນີ້, ຂ້າພະເຈົ້າບໍ່ປາຖະຫນາຫຍັງນອກເຫນືອໄປຈາກໄດ້ຮັບການຄຸ້ມຄອງຈາກອຳນາດການປົກຄອງຂອງປະເທດຫນຶ່ງທີ່ມີອິດສະຫລະພາບ. ທີ່ວິທະຍາໄລ, ຂ້າພະເຈົ້າກໍໄດ້ບັນດາຫລັກການພື້ນຖານກ່ຽວກັບກົດຫມາຍແລະຂ້າພະເຈົ້າຫວັງວ່າສານທີ່ບໍ່ມີຄວາມລຳອຽງຫນຶ່ງຈະຄຸ້ມກັນເອົາຂ້າພະເຈົ້າ.

ແຕ່ທັງ ໂຣບິນເຊີນ ແລະ ແດັນອາໂຣນໂຢ ລ້ວນແຕ່ບໍ່ຟັງຄຳເວົ້າຂອງຂ້າພະເຈົ້າເລີຍ. ເຂົາເຈົ້າພວມປຶກສາກັນກ່ຽວກັບທຳນຽມໃນການມອບຕົວຂ້າພະເຈົ້າໃຫ້ແກ່ບັນດາອົງການກົດຫມາຍຂອງອະເມລິກາ.

ເຂົາເຈົ້າໄດ້ຮັບໂທລະເລກສະບັບຫນຶ່ງຈາກນະຄອນ ແມັກຊິກໂກ ໂດຍມີເນື້ອໃນວ່າເຫັນດີສົ່ງຕົວນັກໂທດຄືນ. ສາມຊົ່ວໂມງຕໍ່ມາ ເຄື່ອງບິນລົງຫນ້ານ້ຳລຳຫນຶ່ງຈະມາເຖິງແລະຈະນຳຕົວຂ້າພະເຈົ້າໄປຈາກມາຊາດລານ.

ຂ້າພະເຈົ້າຈະບໍ່ເກັບເອົາການທັດສະນາຈອນທີ່ຫຍຸ້ງສະຫມອງ ແລະບັນດາທີ່ພາລາຕີເລີ່ມແລກທີ່ນອນຢູ່ໃນຄຸກຫລັງຫນຶ່ງເຊິ່ງກໍ່ສ້າງຂຶ້ນມາຕາມຄວາມຮຽກຮ້ອງຕ້ອງການຕ່າງໆຂອງວິທະຍາການໂທດ ແລະຂອງພື້ນຖານວິທະຍາການສະຖາປັດຕະນິຍະກຳເຫລົ່ານັ້ນມາເລົ່າຄືນຂ້າພະເຈົ້າຄ່ອຍໆຊິນເຄີຍກັບສະພາບຂອງຄົນຜູ້ຫນຶ່ງທີ່ນຸ່ງເສື້ອລາຍແຊກ, ຕິດນ້ຳເບີບັກໃຫຍ່ "໑໐໑໑" ນັ້ນແລ້ວ. ນັ້ນແມ່ນນ້ຳເບີນັກໂທດທີ່ໃຊ້ແທນຊື່ທີ່ພໍ່ແມ່ໄດ້ຕັ້ງໃຫ້ຂ້າພະເຈົ້າທີ່ແອຊູໂອເອີ.

ຂ້າພະເຈົ້າຖືກສອບສວນສອງສາມຄັ້ງ. ທ່ານກະແຣັກ, ພະນັກງານສອບສວນຜູ້ຫນຶ່ງ,

ຟັງຂ້າພະເຈົ້າເລົ່າເລື່ອງຄືນທຸກຢ່າງ, ສ່ວນຜູ້ບັນທຶກນັ້ນນ້ອຍຫັນ, ພິມກູດ, ກໍແວ່ນຕາກ່າຍດັງກໍອິດສາພະຍາຍາມບັນທຶກເອົາໄວ້.

ຕໍ່ມາ, ມີເທື່ອໜຶ່ງ, ເມື່ອຂ້າພະເຈົ້າກ້າວເຂົ້າໄປໃນຫ້ອງການຂອງຜູ້ສອບສວນ, ລາວເວົ້າກັບຂ້າພະເຈົ້າດ້ວຍທ່າທາງພິດພື້ນທີ່ສຸດ:

- ບັດນີ້ພວກເຮົາມາເຮັດບົດສະຫລຸບເນາະ!

ຄັ້ງກ່ອນນັ້ນບົດວິລະນິພົນຂອງຂ້າພະເຈົ້າຈົບລົງຢູ່ທີ່ຕອນທີ່ແດນອາໂຮນໂຍ ຈີ້ປາກປືນສັ້ນໃສ່ດັງຂອງຂ້າພະເຈົ້າ.

- ດ້ວຍຄວາມຍິນດີ, ທ່ານ ກະແຣັກ, - ຂ້າພະເຈົ້າເຫັນດີແລະແນມເບິ່ງປຶ້ມສອງສາມເຫລັ້ມໜາປຶກ -"ຄະດີກາກເນໂຣ" ນັ້ນດ້ວຍຄວາມແປກໃຈ. ປຶ້ມຕ່າງໆເຫລົ່ານັ້ນວາງໄວ້ຕໍ່ໜ້າຂອງ ກະແຣັກແລະລາວພວມເປີດແຕ່ລະໜ້າແຮງໆ.

- ເປັນອັນວ່າເຈົ້າຢືນຢັນວ່າເຈົ້າເປັນ ເຊມຸຍແອນປິນ ຢູ່ ແອຊູໂອເຣີ ແມ່ນດີ, - ຜູ້ສອບສວນເວົ້າ, ຫາວຢ່າງຫວານຊື່ນ. - ຂ້ອຍຂໍອະນຸຍາດປິ້ນບັນຫາຄືນແລະປະຕິເສດເທບນິຍາຍອາລັບທັງໝົດຂອງເຈົ້າ. ໂດຍສວຍໃຊ້ສິດອຳນາດອັນບໍ່ຈຳກັດຂອງອົງການຍຸດຕິທຳຂອງພວກຂ້ອຍນັ້ນ, ຂ້ອຍໄດ້ຕິດຕາມຊາຕາກຳຂອງທ້າວປິນຄົນໃດຄົນໜຶ່ງທີ່ເຄີຍເຮັດວຽກຢູ່ໃນນິຄົມຂອງທ່ານ ໂປນລົກທີ່ແປັນຢາບ. ຕໍ່ມາ ປິນ ຜູ້ນີ້ຖືກຕັດສິນໂທດຢູ່ຮັງກູນ ດ້ວຍໂທດຂີ້ລັກງູເຫລືອມສາມສິບໂຕຢູ່ສວນສັດຂອງລາຊະອານາຈັກ ...

- ຜິດທັງນັ້ນ! - ຂ້າພະເຈົ້າຮ້ອງແຜດຂຶ້ນ. - ບໍ່ແມ່ນງູເຫລືອມ, ແຕ່ເປັນງູ ເດີຍີເຣີ! ແລະກໍບໍ່ແມ່ນຂ້າພະເຈົ້າ, ແຕ່ແມ່ນ ວານດິກເປັນຜູ້ລັກ.

- ຫ້າມເວົ້າຕັດຄວາມ ທ່ານ ກະແຣັກ, - ຜູ້ບັນທຶກພິມກູດກ່າວເຕືອນຂ້າພະເຈົ້າ. - ເພິ່ນບໍ່ມັກໃຫ້ຜູ້ອື່ນຕັດບົດ. ບໍ່ຊັ້ນມີແຕ່ຈະລຳບາກເຈົ້າເທົ່ານັ້ນ.

ທ່ານ ກະແຣັກ ຫາວ, ເຫລືອດຕາແນມເບິ່ງເພດານແລ້ວເວົ້າຕໍ່:

- ກໍແມ່ນທ້າວ ປິນ ຜູ້ນີ້ລະທີ່ໃຊ້ອຸບາຍກໍ່ກຳຄືເຮັດໃຫ້ທ່ານລັດຖະມົນຕີອາກຊັງຕິນຖືກນ້ຳຮ້ອນລວກໃນຫ້ອງອາຫານເທິງກຳປັ່ນເດີນທະເລ. ໜີໄປທີ່ ຮົງກົງເພື່ອຫລົບຫລີກຈາກອຳນາດການປົກຄອງ. ເຈົ້າກໍຮັບຮູ້ຈຳນວນໜຶ່ງແລ້ວກ່ຽວກັບພຶດຕິກຳໂຫດຫ້ຽມຂອງທ້າວ

ປຶນອັນທະພານຜູ້ນີ້, ແລະເຈົ້າກໍໄດ້ເລົ່າໃຫ້ຂ້ອຍຟັງແລ້ວກ່ຽວກັບເລື່ອງປຶກຍ່ອຍທັງຫມົດເຫລົ່ານັ້ນ, ພຽງແຕ່ວ່າດ້ວຍຮູບແບບເບົາບາງກ່ວາ...

ຂ້າພະເຈົ້າໄດ້ແຕ່ຍິ້ມຫົວຢ່າງຂົມຂື່ນ.

- ບໍ່ໄດ້ຫົວ, - ຜູ້ບັນທຶກພິມກູດນັ້ນເວົ້າອີກ. -ທ່ານ ກະແຣັກບໍ່ມັກໃຫ້ໃຜຫົວ, ບໍ່ຊັ້ນເຈົ້າຈະລໍາບາກກ່ວານີ້.

ຂ້າພະເຈົ້າເວົ້າອອດໆແອັດໆຄືກັບຫັນໃຈຟືດ:

- ລໍາບາກກ່ວານີ້ແມ່ນລໍາບາກແບບໃດ?

ກະແຣັກ ບໍ່ໄດ້ໂມໂຫ, ລາວເຫລືອດຕາຂຶ້ນຄືກັບພວມອ່ານແກວຕົວອັກສອນຢູ່ເທິງເພດານເຊິ່ງມີແຕ່ລາວຜູ້ດຽວເທົ່ານັ້ນທີ່ແນມເຫັນ.

ລາວເວົ້າຊ້າໆ, ຢ່າງມີເຫດມີຜົນວ່າ:

- ແລະເຂົາເຈົ້າໄດ້ຄົ້ນພົບສົບຂອງ ເຊມຸຍແອນບຶນຢູ່ທະເລໃກ້ໆແຫລມ ລູກາ, ຫົວແຕກມຸ່ນຫມົດຍ້ອນພອງຕີເຂົ້າໃສ່ຝັ່ງໃນຄືນວັນທີ ໑໑ ເດືອນສີ່...

- ເອີ່, ທ່ານ ເຢີ້ຍຫຍັນຂ້າພະເຈົ້າຫວະ? - ຂ້າພະເຈົ້າລຸກພືດຂຶ້ນຈາກຕັ່ງ.

ກະແຣັກ ຈັບຕາແນມເບິ່ງຂ້າພະເຈົ້າ.

- ເພື່ອນເອີຍ, ຜູ້ສອບສວນ ກະແຣັກ ນີ້ເປີດໂປງຄະດີຂ້າຄົນມາໄດ້ສາມຮ້ອຍກັບແປດກໍລະນີແລ້ວ, ສອງຮ້ອຍຄະດີປຸ້ນຈີ້, ຄົ້ນພົບຮ່ອງຮອຍຂອງພວກຫລອກລວງຫ້າພັນຄົນແລະມາເຖິງຕອນນັ້ນເຂົາກໍໄດ້ສະຫລຸບ... - ຮອດນີ້, ກະແຣັກ ໄດ້ຈັບເອົາຫນຶ່ງໃນຈໍານວນປຶ້ມເຫລົ່ານັ້ນຂຶ້ນມາແຫຍ່ໃສ່ຫນ້າຂອງຂ້າພະເຈົ້າ ແລະເວົ້າເສີມໃສ່ດ້ວຍສຽງອັນນຸ່ມນວນ: - ເຂົາບໍ່ໄດ້ຫົວເຢີ້ຍຫຍັນດອກ ເຂົາພວມໄຫ້ເພາະເຫັນວ່າຈັ່ງໃດວິນຍານຂອງມະນຸດຈຶ່ງຈະຕໍ່າຊ້າເລວຊາມໄດ້ເຖິງພຽງນີ້. ເຂົາມີຂໍ້ພິສູດພຽງພໍກ່ຽວກັບເລື່ອງທັງຫມົດເຫລົ່ານີ້...ນີ້! - ເວົ້າຮອດຕອນນີ້, ກະແຣັກກໍເດ່ເຈ້ຍສີ່ຫລ່ຽມໃບຫນຶ່ງມາໃຫ້ຂ້າພະເຈົ້າເບິ່ງ. - ຫັ້ນ...ເຂົາເຈົ້າຄົ້ນພົບມັນຢູ່ໃນກົງເສື້ອເຊີດຂອງສົບຜູ້ຕາຍທີ່ຟອງທະເລພັດມັນຂຶ້ນຝັ່ງ.

ໃບປະກາດສະນີຍະບັດຈົບການສຶກສາວິທະຍາໄລ ດີຍັງ! ນັ້ນແມ່ນໃບປະກາດສະນີຍະບັດຂອງຂ້າພະເຈົ້າ! ມັນຫົດຫູ່ຫຍໍ້ແຫຍ້ໄປຍ້ອນຊຶມນໍ້າທະເລ. ແຕ່ມັນກືກພື້ນຟູຄືນມາຢ່າງລະ

ມັດລະວັງໃນຫ້ອງທົດລອງສອບສວນພາບຄະດີ. ສີຄຳຢູ່ເທິງຫົວສິງໂຕຫລ່າລົງຫມົດແລ້ວ, ສ່ວນຢູ່ຈອມດັງສິງໂຕນັ້ນເຫັນມີຮອຍຫຍູ້ຍາວໆ ພາໃຫ້ມັນມີຮູບຮ່າງຄືກັບຊາຍຊະລາຂີ້ເຫລົ້າຜູ້ຫນຶ່ງ.

ຂ້າພະເຈົ້າໄດ້ພຽງແຕ່ນັ່ງຕົບຫນ້າຜາກຢູ່ປົວະໆ ເພາະວ່າເມື່ອແລກປ່ຽນເສື້ອເຊີດກັບອິຕາຕົນໂບຍນັ້ນ, ຍ້ອນເມົາຫລົ້ນ, ຂ້າພະເຈົ້າຈຶ່ງລືມໄປວ່າໃບປະກາດສະນີຍະບັດນັ້ນຍັດໄວ້ຢູ່ກົງເບື້ອງໃນ.

ຂະນະທີ່ຍັງຕື່ນເຕັ້ນຢູ່ນັ້ນ, ຂ້າພະເຂົ້າເລີ່ມເລົ່າເລື່ອງທີ່ຂ້າພະເຈົ້າແລະ ຕົນໂບຍ ຫລົ້ນຫມາກສະກາຢູ່ເທິງກຳປັ່ນ "ບຸກຊຸກ" ຈັ່ງໃດກັນ. ກະແຣັກ ໂບກໄມ້ໂບກມື.

- ພໍເຊົາແລ້ວຫລະ, ເພື່ອນຜູ້ເອີ້ນຕົນເອງວ່າ ບິນເອີຍ. ຈົ່ງຟັງຄຳສະຫລຸບຕ່າງໆຂອງເຮົານີ້. ເຈົ້າໄດ້ເຮັດວຽກໃຫ້ສາດສະດາຈານ ໂຣນເຊີ. ເຈົ້າໄດ້ຂ້າລາວ, ເກັບທ້ອນເອົາຊັບສົມບັດທີ່ມີຄ່າຕ່າງໆແລ້ວກຽມໂຕນຫນີ. ແຕ່ພັກພວກຮ່ວມໂທດກັບເຈົ້າມາຊ້າເກີນໄປ, ພວກມັນບໍ່ທັນມາຊຸກເຊື່ອງສົມບັດທີ່ປຸ້ນໄປໄດ້ນັ້ນຊ່ວຍເຈົ້າ. ແດັນອາໂຣນໂຍ ຄົ້ນພົບເຈົ້າກ່ອນທີ່ພັກພວກຂອງເຈົ້າຈະມາເຖິງ. ເຈົ້າວິຕົກ, ເຈົ້າອອກຈາກເຮືອນເພື່ອໄປຮັບເອົາພວກລູກມືທີ່ເຈົ້າຄ່ອງຄອຍນັ້ນ. ເຂົາເຈົ້າພົບເຈົ້າຢູ່ຝັ່ງທະເລ. ນີ້ແມ່ນຫລັກຖານຈາກຄຸນພໍ່ ອີຍາຊີອຸດວີໂລໂຣເຢ ທີ່ຫນ້າເຄົາລົບນັບຖື, ຜູ້ເຊິ່ງຮູ້ຈັກເຈົ້າດີແຕ່ຄາວຢູ່ ເວເນຊູເອລາ ບ່ອນທີ່ເພິ່ນໄດ້ລ້າງບາບໃຫ້ເຈົ້າ ກ່ອນວັນທີ່ເຈົ້າຈະຖືກນຳໄປປະຫານ... ນີ້, ແມ່ນບັນດາຫລັກຖານຈາກນາງຂາຍນ້ຳຫມາກໄມ້ ແມກເຊແດັກ ກລີຊາເນຍ, ຜູ້ເຊິ່ງເຈົ້າ ເຄີຍມີນ້ຳໃຈກ້ວາງຂວາງທີ່ໄດ້ມອບໃຫ້ນາງລ້າງຫ້າສິບເປໂຊ* ...ນາງນັ້ນແນມເຫັນກະເປົານ້ອຍຂອງເຈົ້າ ແລະນີ້ອີກ, ແມ່ນບັນດາຫລັກຖານຈາກສາລະວັດຄູອານໂລແຣັດ, ຜູ້ທີ່ຕິດຕາມເຈົ້າຢູ່ຫ່າງໆ ...

- ຮື! ທ່ານກະແຣັກ, ແນວຄິດຂອງເຈົ້າເຮັດໃຫ້ຂ້ອຍສະທ້ອນໃຈທີ່ສຸດ. - ຂ້າພະເຈົ້າຕອບຢ່າງເຄັ່ງຂຶມ. - ທ່ານຮູ້ບໍ່ວ່າ, ຜ່ານມາຂ້ອຍບໍ່ຄຶດຈັກເມັດເລີຍວ່າພະຄຸນພໍ່ ອີຍາຊີອຸດຈະຮູ້ຈັກຂ້ອຍ. ຄັນຊັ້ນແລ້ວ, ທ່ານຕ້ອງການຫຍັງ?

---

* ເປໂຊ: ຫົວຫນ່ວຍເງິນຕາຂອງບັນດາປະເທດອາເມລິກາລາຕິນ.

- ພວກຂ້ອຍຈະໄຕ່ສວນໃຫ້ຈົບເກືອບທີ່ສຸດ, - ກະແຣັກ ເວົ້າດ້ວຍທ່າທາງອວດໂຕ. - ພວກເຮົາສິນໃຈໂທດກຳໂຕສຸດທ້າຍຂອງເຈົ້າ. ພວກເຮົາຄົ້ນພົບທຸກສິ່ງທຸກຢ່າງແລ້ວ. ໃຜກໍ່ກຂ້າແດ່ກໍຮູ້ແລ້ວ, ກໍ່ກຂ້າຢູ່ໃສກໍຮູ້. ດ້ວຍວິທີໃດຄືແນວໃດ, ເປັນຈັ່ງໃດ, ເມື່ອໃດ, - ລ້ວນແຕ່ຮູ້ດີ. ເປັນອັນວ່າເຈົ້າຈະກໍ່ກນຳຕົວຂຶ້ນສານ. ເຂົາເຈົ້າຈະບໍ່ແຂວນຄໍເຈົ້າຄືຢູ່ ແມັກຊິກ, ແຕ່ຈະໃຫ້ເຈົ້ານັ່ງຕັ່ງໄຟຟ້າ. ຈັ່ງໃດລະ, ງຽບຢູ່ຫວະ? ຂ້ອຍເຂົ້າໃຈ. ໃຜກໍມີຄວາມວິຕົກ ເມື່ອໄດ້ຍິນຂ້ອຍເອີ່ຍເກືອບທ່ານ ນາຍເບເຣີ, ຜູ້ບັນຊາ ອາວຸດຕະພັນໄຟຟ້າ ທີ່ ຊິນເກີ ຊິນເກີ. ນິ, ສູບສາ...

ດ້ວຍວາດທີ່ສຸພາບ ກະແຣັກ ເດ່ຊອງຢາສູບມາໃຫ້ຂ້າພະເຈົ້າ. ຂ້າພະເຈົ້າສູບແລະຄົ້ນຄິດຢູ່ຢ່າງສຸຂຸມ.

ເປັນອັນວ່າ ຂ້າພະເຈົ້າ ເກືອບວ່າຈະເວົ້າດ້ວຍຄວາມຈິງໃຈປານໃດ ກໍຄົງບໍ່ສາມາດເຮັດໃຫ້ໃຜເຊື່ອໄດ້ວ່າ ຂ້າພະເຈົ້າຄື ປົນ, ແຕ່ບໍ່ແມ່ນນັກໂຈນ ກາກເບໂຣ ໃດຫນຶ່ງ. ໃບປະກາດສະນິຍະບັດນັ້ນກໍ່ກຄົ້ນພົບໃນກົງເສື້ອຂອງຂ້າພະເຈົ້າໃນຂະນະກວດຄົ້ນສິບຂອງ ຕົນໂບຍ. ຍ້ອນແນວນັ້ນສະພາບການມັນ ຈຶ່ງຫນີບຮັດເຂົ້າຕື່ມອີກ. ທຸກສິ່ງທຸກຢ່າງທີ່ຂ້າພະເຈົ້າສາມາດນຳມາອ້າງອີງເພື່ອເປັນສິ່ງປະກັນຕົວເອງນັ້ນກໍລ້ວນແຕ່ປະກົດວ່າເປັນທີ່ເຊື່ອບໍ່ໄດ້ ສຳລັບຜູ້ສອບສວນຄົນນັ້ນ, ຄົນຜູ້ເຊິ່ງປະຈຸບັນນີ້ສູບຢາຢູ່ຢ່າງມິດງຽບດ້ວຍທ່າທາງຄ່ອມຄົມຍິ່ງ ແລະເພື່ອຕອບຂ້າພະເຈົ້ານັ້ນລາວພຽງແຕ່ຍົກໄຫລ່ຫລືບໍ່ກໍພຽງແຕ່ຍິ້ມຫົວເຍາະເຍີ້ຍເທົ່ານັ້ນ. ຂ້າພະເຈົ້າບໍ່ມີເງິນພໍອັດເພື່ອຈະຈ້າງນັກກົດຫມາຍ, ອາໃສເພິ່ນເປັນຜູ້ຮີບໂຮມເອກະສານຈັກກອງເພື່ອພິສູດວ່າຂ້າພະເຈົ້າແມ່ນປົນ. ມັນຈຳເປັນຮີບໂຮມຫລັກຖານຕ່າງໆ, ເລີ່ມຕົ້ນແຕ່ແອຊູໂອເຣີ ແລະ ດີຍັງ, ຊອກຄົ້ນແມ້ກະທັ້ງຄົນດັ່ງໄຟຢູ່ເທິງກຳປັ່ນ "ແມວຂຽວ".

ຂະນະນັ້ນ ໃບຫນ້າພິເຜດແລະສຽງເວົ້າຫວານໆຂອງ ວານດິກ ກໍປະກົດຂຶ້ນຢ່າງເດັ່ນຊັດໃນສະຫມອງຂອງຂ້າພະເຈົ້າ. ຂ້າພະເຈົ້າຍັງຈົດຈຳໄດ້ ແມ້ກະທັ້ງຕອນທີ່ຂ້າພະເຈົ້າບີບຄໍຫອຍມັນຢູ່ໃນອຸທິຍານງູ. ຂ້າພະເຈົ້າກຳກຳປັ້ນເຂົ້າແຫນ້ນໆ, ຈ້ອງເບິ່ງແກ່ນຕາສວດຂາວມ້ານໆຂອງກະແຣັກ ແລະເວົ້າອອກມາແຕ່ລະຄວາມຢ່າງຊັດເຈນວ່າ:

- ຈົ່ງເອົາຂ້າພະເຈົ້າຂຶ້ນສານ, ຂ້າພະເຈົ້າຈະທຳການປົກປ້ອງຕົນເອງ.

ຕາທັງຄູ່ຂອງ ກະແຣັດ ແນມຂຶ້ນເບິ່ງເພດານຄືພວມອະທິຖານ.

- ເພື່ອນເອີຍ. ຫາລະບິກປ້ອງ, ເຈົ້າບໍ່ມີທາງຈະລອດດອກ.

ຂ້າພະເຈົ້າກອກນ້ຳອອກຈາກກະຕຸກແລ້ວຫຼຸບກິນຫມົດຈອກຫນຶ່ງເຕັມໆຈົນແຫ້ງສົດ.

ຄວາມຫຸ່ນຫ່ຽງໄດ້ກັບຄືນມາອີກ, ເພາະວ່າມັນສະຫມອງຂອງຂ້າພະເຈົ້າປະກົດວ່າຟື້ນສະຕິຂຶ້ນມາຢ່າງກະທັນຫັນ.

ຄືກັບແສງຟ້າແມບແຫກຜ່ານນ່ານຟ້າ, ຄວາມຄິດອັນຫນຶ່ງເປັນປະກາຍແວັບຂຶ້ນໃນຫົວຂອງຂ້າພະເຈົ້າ, ຄວາມຄິດນັ້ນ ມັນງ່າຍດາຍເກີນໄປ, ຊວນໃຫ້ຂ້າພະເຈົ້າຕ້ອງແປກໃຈວ່າເປັນຫຍັງຂ້າພະເຈົ້າຈຶ່ງບໍ່ຄິດອອກແຕ່ດົນພຸ້ນ.

## ຕອນທີເຈັດ

### I

ຂ້າພະເຈົ້າລໍຖ້າໃຫ້ສານເອີ້ນຕົວເກືອບເດືອນເຄິ່ງ. ວຽກທີ່ຄົນໂທດຕ້ອງເຮັດຢ່າງຫລີກບໍ່ໄດ້ນັ້ນ ໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມເບື່ອຫນ່າຍເປັນພິເສດ, ມີແຕ່ຄົນຢູ່ໃນຄຸກເທົ່ານັ້ນຈຶ່ງມີຄວາມຮູ້ສຶກເຊັ່ນນີ້. ພວກຂ້າພະເຈົ້າຈຳຕ້ອງຫຍິບປຶ້ມຄຳພີອະທິຖານເຫລັ້ມຕ່າງໆ. ແຕ່ນັ້ນມາເທວະຮູບກາງການພາວທີ່ພິມເປັນພາບນູນສີຄຳແລະຕົວອັກສອນທີ່ພາດຫົວເລື່ອງວ່າ "ພະຄຳພີ" ນັ້ນຍາມໃດກໍເຮັດໃຫ້ຂ້າພະເຈົ້າເກີດໂມໂຫຈົນປ່ວງບ້າຂຶ້ນ.

ມີເທື່ອຫນຶ່ງ, ໃນຂະນະທີ່ໄປຍ່າງຫລິ້ນຢູ່ກາງຄຸກ, ມີໃຜຜູ້ຫນຶ່ງໃນກຸ່ມນັກໂທດຍັດເຈ້ຍແຜ່ນຫນຶ່ງໃສ່ມືຂອງຂ້າພະເຈົ້າ: "ກາກເນໂຣ, ກູ້າຕ້ອງການຂ້ອຍພ້ອມແລ້ວທີ່ຈະຊ່ວຍເຈົ້າ. ບົກເດັນ".

ຂ້າພະເຈົ້າຍ່ອງຍົດເຈ້ຍແຜ່ນນັ້ນຢູ່ໃນອຸ້ງມືທີ່ປຽກເປື້ອນດ້ວຍນ້ຳເຫື່ອນັ້ນຈົນ ມັນເປື່ອຍມຸ່ນໄປຈຶ່ງເຊົາ, ແລະບໍ່ຕອບຫຍັງເລີຍ,

ກາງຄືນ ຂ້າພະເຈົ້ານອນບໍ່ໄດ້. ຄວາມຄິດຕ່າງໆທາລຸນຂ້າພະເຈົ້າຢູ່ຢ່າງບໍ່ຢຸດຢັ້ງ. ສັດຕູທີ່ອັນຕະລາຍທີ່ສຸດເຊິ່ງມະນຸດຮູ້ຈັກດີ ແລະພວມຕ້ານກັບຂ້າພະເຈົ້ານັ້ນຄືຄວາມຄິດແບບຕ່ຳຊ້າ.

ສິ່ງດັ່ງກ່າວນີ້ສາມາດຕີໃຫ້ມັນປະລາໄຊໄປໄດ້ກໍດ້ວຍມັດອັນວ່ອງໄວ, ແຫລມຄົມທີ່ສຸດເທົ່ານັ້ນ. ຈະຕ້ອງທະຍານເຂົ້າໂຈມຕີມັນຢ່າງສັບພະລັງດ້ວຍນ້ຳໃຈເຊື່ອໝັ້ນຢ່າງສົມບູນຕໍ່ໄຊຊະນະ.

ກ່ອນມື້ກຶກນຳຂຶ້ນສານ, ຫົວໜ້າທຳມະໂລງ ດະຍຶກເຊີ, ເປັນຄົນຮ່າງຂະໜາດຍັກ, ແກຫົວໂລ້ນພ້ອມທັງມີໃບຫູໃຫຍ່ອຸ້ນຕຸ້ນ, ໄດ້ອະນຸມັດຢ່າງເອື້ອອາລີໃຫ້ຂ້າພະເຈົ້າໄດ້ພັກຜ່ອນຕອນທ່ຽງຢູ່ເທິງຕຽງ. ຂ້າພະເຈົ້ານອນເສີຍຢູ່, ກ່າຍຕີນທັງຄູ່ຂຶ້ນສູງຈົນກາຍຫົວ.

ດະຍຶກເຊີ ແນມເບິ່ງຂ້າພະເຈົ້າດ້ວຍຄວາມເຫັນໃຈ:

- ນ້ອຍເອີຍ, ມື້ອື່ນ ມຶງຈະຕ້ອງວຸ້ນສະໝອງແລ້ວ. ກູຮູ້ສຶກວ່າ ມຶງບໍ່ຄືຊິບໍ່ຕ່າງຫຍັງກັບກະຕ່າຍກຶກແຮ້ວທີ່ເຂົາຫ້າງຈັບເສືອ. ແຕ່ເບິ່ງຊີງມຶງບໍ່ມີວາດຂອງຄົນຜູ້ໜຶ່ງທີ່ເຄີຍລ້າງຜານມະນຸດມາເກືອບສອງໂຫລແລ້ວນັ້ນຈັກໜ້ອຍເລີຍ. ມື້ອື່ນຕອນເຂົາເອົາມຶງຂຶ້ນລົດນັ້ນຢ່າໄດ້ຫາທາງໂຕນໜີ. ກູຮູ້ວ່າຫວ່າງຢ່ານີ້ ຄົນຢູ່ໃນເຮືອນຈຳເບີເກົ້າ ໄດ້ສິ່ງເຈ້ຍແຜ່ນໜຶ່ງຂອງ ບິກເດັນໃຫ້ມຶງຢູ່ເດີ່ນ, ແລະມຶງບໍ່ໄດ້ໃຫ້ຄຳຕອບຫຍັງກັບຜູ້ຂຽນ.

- ທ່ານ ດະຍຶກເຊີ ທີ່ຮັກແພງ, ຖ້າພໍເປັນໄປໄດ້ ຂໍທ່ານຈົ່ງກະລຸນາເວົ້າກັບອີ່ຕາ ບິກເດັນຊ່ວຍແດ່ວ່າ ຈົ່ງປ່ອຍໃຫ້ຂ້ອຍໄດ້ຢູ່ສະຫງົບ. ຈົ່ງບອກກັບທຸກໆຄົນໃຫ້ປ່ອຍຂ້ອຍໄດ້ຢູ່ຢ່າງສະຫງົບແດ່.

ຂ້າພະເຈົ້າກ່າຍຕີນຂຶ້ນສູງກ່ວາເກົ່າແລ້ວເຮັດຕີນອນຫລັບ.

ດະຍຶກເຊີ ອອກໄປ, ສ່ວນຂ້າພະເຈົ້າກໍສວຍໃຊ້ບັນດາເວລານາທີສຸດທ້າຍເຫລົ່ານັ້ນເພື່ອທົບທວນຄວາມເວົ້າທຸກຢ່າງຢູ່ໃນສະໝອງເຊິ່ງຂ້າພະເຈົ້າຈະໃຫ້ການຕໍ່ໜ້າສານ ໃນມື້ອື່ນ.

ເມື່ອເຂົານຳຕົວຂ້າພະເຈົ້າຂຶ້ນສານ, ໃນໃຈຂອງຂ້າພະເຈົ້າກໍຄອງຄອຍວ່າຈະໄດ້ເຫັນສິ່ງໃດສິ່ງໜຶ່ງທີ່ຍິ່ງໃຫຍ່, ແລະເປັນໜ້າງຶດງໍ້ ແຕ່ຄວາມຈິງແລ້ວໃນຫ້ອງໃຫຍ່ໂຖງນັ້ນ, ມີຄົນບໍ່ເກີນຮ້ອຍຄົນ, ນັບທັງມວນຊົນຜູ້ທີ່ສະຫລອກກອກທີ່ຢາກຮູ້ວ່າ ເຂົາເຈົ້າຈະຕົ້ມຈະແກງຂ້າພະເຈົ້າຢູ່ເທິງຕັ່ງໄຟຟ້າດ້ວຍຂໍ້ອ້າງຊະນິດໃດ.

ຂ້າພະເຈົ້າພໍໃຈນຳທ່ານຜູ້ພິພາກສາເປັນຢ່າງຍິ່ງ, ລາວຄ້າຍຄືກັບພະຄຸນພໍ່ ອີແອເຣມີອາ

ຂອງພວກຂ້າພະເຈົ້າຢູ່ ແອຊູໂອເຣີ, ເປັນຄົນແຫນ້ນ ຫັນ, ມີເນື້ອມີນວນ, ແຕ່ມັກຈະເຊື່ອງຊ້າ, ປະກົດວ່າລາວຫາກໍກິນອາຫານເຊົ້າອີ່ມໂພດ. ຄະນະພິພາກສານັ່ງຢູ່ເທິງຕັ່ງອີ້ເຊິ່ງຫັນໜ້າກັບຂ້າພະເຈົ້າ, ບັນດາໃບຫນ້າຂອງເຂົາເຈົ້າປະສານກັນເຂົ້າເປັນຈຸດຫນຶ່ງ, ແລະປະຈຸບັນນີ້ ຂ້າພະເຈົ້າບໍ່ສາມາດຈື່ຈຳບັນດາໃບຫນ້າເຫລົ່ານັ້ນໄດ້ເລີຍ. ທ່ານໄອຍະການສານເບິ່ງແລ້ວປະກົດວ່ານ້ອຍໆ, ເມື່ອຕອນລາວນັ່ງຢູ່ຂ້າງໂຕະແລະຫງ່ງງຄິວເຂົ້າຫາບັນດາປຶ້ມ "ຄະດີກາກເປໂຣ" ທີ່ຂ້າພະເຈົ້າເຄີຍຮູ້ຈັກມາແລ້ວນັ້ນ. ແຕ່ເມື່ອລາວຍືດຄີງໃຫ້ຊື່ເພື່ອຈະຢືນຂຶ້ນແລະເວົ້າກັບຜູ້ພິພາກສາ "ເອີ້ຈ້າວ" ແລ້ວ, ລາວກັບກາຍມາເປັນຄົນຈ່ອຍສູງເດວເວວ ຈົນເຂົາເຈົ້າສາມາດແນມເຫັນຮອດກະດຸມຄໍາທີ່ຕິດຢູ່ປາກແຂນເສື້ອຂອງລາວ.

ຂ້າພະເຈົ້າຕຽມພ້ອມຮັບເອົາສະຖານະການອັນຮ້າຍແຮງທີ່ສຸດຢ່າງໃດຢ່າງຫນຶ່ງ ທີ່ຈະເກີດຂຶ້ນ. ເຂົາເຈົ້າຈະກອກໂທດກຳຂອງກາກເປໂຣນັ້ນລົງໃສ່ຫົວຂອງຂ້າພະເຈົ້າທຸກຢ່າງແລະພະຄຸນພໍ່ ອີຍາຊີອຸດ ໃດຫນຶ່ງຈະຮັບຮູ້ຂ້າພະເຈົ້າຢ່າງຈິງຈັງດ້ວຍຄວາມຫລົງເຊື່ອວ່າເປັນນັກໂຈນຢູ່ອາເມລິກາໃຕ້, ນອກນັ້ນຍັງບໍ່ທັນໄດ້ນັບທັງນາງ ແມກເຊແດັກທີ່ຫນ້າຮັກ, ຜູ້ເຊິ່ງໄດ້ຮັບເງິນຈາກຂ້າພະເຈົ້າຫ້າສິບ ເປໂຊ ນັ້ນເລີຍ.

ແຕ່ທ່ານ ໄອຍະການແລະບັນດາຜູ້ທີ່ຢູ່ໃນຄະນະພິພາກສາບໍ່ມີທ່າທີເນັ້ນຫນັກໃສ່ບັນດາໂທດກຳຂອງກາກເປໂຣເລີຍ. ເຂົາເຈົ້າສົນໃຈນຳຄະດີຄາດຕະກຳສາດສະດາຈານ ໂຣນເຊີຫລາຍກວ່າ. ຍ້ອນແນວນັ້ນ ເຂົາເຈົ້າຈຶ່ງພຽງແຕ່ຫວນຄືນເຖິງສິ່ງຕ່າງໆທີ່ ແດັນອາໂຣນໂຢ ຄົ້ນພົບຢູ່ໃນເຮືອນຂອງໂຣນເຊີ. ບັນຫານີ້ມີສ່ວນເຮັດໃຫ້ຄະນະພິພາກສາແລະມວນຊົນໂສ້ເຫ້ລກັນຂຶ້ນຫນ້ອຍຫນຶ່ງ.

ທ່ານ ຕຸລາການກົດກະດິງຢ່າງເຊື່ອງຊ້າ ແລະເວົ້າເຮັດສົບຍວງອອກມາທາງຫນ້າ:

- ພວກນັກຂ່າວ ມິດໃຫ້ທານແດ່!

ຢູ່ທາງແຈຫ້ອງ, ເບື້ອງຫລັງຮົ້ວນ້ອຍ, ມີສອງຄົນນັ່ງກຳປຶ້ມບັນທຶກຢູ່ໃນມື. ນັ້ນຄືພວກນັກຂ່າວນັ້ນເອງ. ນັກຂ່າວຜູ້ຫນຶ່ງພວມຈົດບັນທຶກຢູ່, ສ່ວນອີກຜູ້ຫນຶ່ງນັ້ນຄ້ຽວເຂົ້າຫນົມຢາງຢູ່ຢ່າງສະບາຍອາລົມທັງເຫນັງຄີງຕີງໂດຍບໍ່ເຊົາອັນພາໃຫ້ມີສຽງດັ່ງດ້າງອຶດແອດຢູ່ບໍ່ເຊົາ.

ຂ້າພະເຈົ້າບໍ່ສົນໃຈນຳ ກາກເປໂຣ ອີກ, ຂ້າພະເຈົ້າຊູດເລັບມື, ທຳທ່າບໍ່ສົນໃຈຫຍັງ

ກັບສະຫມຽນເຊິ່ງຂະນະນັ້ນພວມອ່ານຄຳກ່າວຟ້ອງຢ່າງລ່ຽນໄຫລຢູ່ນັ້ນຈັກນ້ອຍເລີຍ.

ໃນທີ່ສຸດສຽງຂອງຜູ້ພິພາກສາກໍດັ່ງລັ່ນຂຶ້ນ:

- ຜູ້ຕ້ອງຫາ, ເຈົ້າຫູຫນວກຫວະ?

- ບໍ່, ຮຽນທ່ານ ຜູ້ພິພາກສາ, - ຂ້າພະເຈົ້າຍືນຂຶ້ນຕອບ.

- ເຈົ້າຈະຍອມຮັບສາລະພາບວ່າຕົນເປັນຜູ້ໄດ້ກະທຳຜິດບໍ່?

ຂ້າພະເຈົ້າຕອບດ້ວຍສຽງທີ່ສຸພາບແລະມີມາລະຍາດທີ່ສຸດ:

- ຂໍໂທດ, ກ່ອນຈະຕອບຄຳຖາມຂອງທ່ານ, ຂ້າພະເຈົ້າຂໍຮ້ອງຮຽນມາຍັງທ່ານຈົ່ງໄດ້ບັນທຶກຄຳໃຫ້ການຂອງຂ້າພະເຈົ້າດັ່ງຕໍ່ໄປນີ້ລົງໃນປຶ້ມບັນທຶກຂອງທ່ານ. ຂ້າພະເຈົ້າມີຊື່ວ່າ ເຊມຸຍແອນປິນ, ເປັນພົນລະເມືອງຢູ່ຕົວເມືອງ ແອຊູໂອເຣີ. ຂ້າພະເຈົ້າບໍ່ເຄີຍຮູ້ຈັກກັບສາດສະດາຈານໂຮນເຊີຜູ້ລ່ວງລັບໄປແລ້ວນັ້ນເລີຍ ແລະບໍ່ເຄີຍໄດ້ເຮັດວຽກງານໃຫ້ເພິ່ນຈັກເທື່ອ, ໃນຊີວິດຂອງຕົນ, ຂ້າພະເຈົ້າບໍ່ເຄີຍຕ້ອງໂທດຫຍັງມາກ່ອນ...

- ຈົ່ງຕອບໃຫ້ມັນກົງກັບຄຳຖາມຂອງຂ້າພະເຈົ້າ, - ທ່ານຜູ້ພິພາກສາ ເວົ້າດ້ວຍສຽງທີ່ເຄັ່ງຄັດ.

- ຂໍໂທດທ່ານ, ຮຽນທ່ານຜູ້ພິພາກສາ. ຂ້າພະເຈົ້າຂໍ ສັນຍາວ່າຈະຕອບທ່ານພາຍຫລັງທີ່ສິ້ນສຸດຄຳໃຫ້ການຂອງຂ້າພະເຈົ້າ. - ຂ້າພະເຈົ້າຂັດຂືນຂຶ້ນດ້ວຍສຽງເຄັ່ງຄັດແບບດຽວກັນນັ້ນ. - ພວກທ່ານໄດ້ຜູກໂທດຂ້າພະເຈົ້າກໍເພາະວ່າເຂົາເຈົ້າຫລົງວ່າຂ້າພະເຈົ້າເປັນຄົນຜູ້ອື່ນ. ນີ້ແມ່ນຄວາມພາດພັ້ງຂອງທ່ານກະແຮັກ, ໃນຂະບວນວິວັດຂອງການສອບສວນ, ເພິ່ນມີແຕ່ສັງລວມເກັບທ້ອນເອົາບັນດາເອກະສານແນໃສ່ລົງໂທດບັກໂຈນຄົນໃດຄົນຫນຶ່ງ, ເຊິ່ງບໍ່ແມ່ນຂ້າພະເຈົ້າ, ເຊມຸຍແອນປິນ ຜູ້ເຊິ່ງມີຊື່ສຽງໂດ່ງດັງກ້ວາງໄປທົ່ວຕົວເມືອງຂອງພວກທ່ານ...

ທ່ານ ຜູ້ພິພາກສາ ເຮັດຫນ້າຫົ້ເຂົ້າ:

- ເຈົ້າເວົ້າວ່າ "ໂດ່ງດັງ" ຫມາຍຄວາມວ່າຈັ່ງໃດ? ເຈົ້າຢາກຢືນວ່າເຈົ້າແມ່ນ ປົນ ຕິ? ທ້າວ ປົນ ທີ່ຖືກຟອງທະເລກຶ້ມສົບຂຶ້ນຝັ່ງນັ້ນຫວະ?

ຢູ່ທີ່ວິທະຍາໄລ ດີຍົງ ເຂົາເຈົ້າສອນພື້ນຖານທາງດ້ານກົດຫມາຍຫຍໍ້ໆໃຫ້ແກ່ຂ້າພະເຈົ້ານັ້ນບໍ່ແມ່ນເລື່ອງໄຮ້ປະໂຫຍດ. ໂອຍ, ອາຈານ ອາວເອເຣີ ແລະ ຊະເລົາລີທີ່ຮັກແພງແລະ

ນັບກືຂອງຂ້າພະເຈົ້າເອີຍ! ມາເຖິງປະຈຸບັນນີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ ຈຳເປັນຕ້ອງຮຽນທຸກສິ່ງຮູ້ທຸກຢ່າງແລະບໍ່ມີວິທະຍາສາດປະເພດໃດທີ່ບໍ່ນຳຜົນປະໂຫຍດມາໃຫ້ແກ່ມວນມະນຸດ ບໍ່ໃນເວລາໃດກໍເວລາຫນຶ່ງ.

- ຈ້າວ, ຮຽນທ່ານຜູ້ພິພາກສາ ແລະສານທີ່ເຄົາລົບ! - ຂ້າພະເຈົ້າເວົ້າດັງໆ, ຍືດຕົວຊື່ຂຶ້ນແລະຊູມືຂຶ້ນ; ຢູ່ວິທະຍາໄລ, ອາຈານ ຊະເລົາລີ ເຄີຍອ່ານຂໍ້ຄວາມຫນຶ່ງທີ່ຄັດອອກມາຈາກຄຳປະກອບຄວາມເຫັນຂອງ ຊີເຊຣີງແລະສະແດງສັງວາດນັ້ນອອກມາພ້ອມ. - ຂ້າພະເຈົ້າຂໍປະກາດຢ່າງເປັນທາງການຂ້າພະເຈົ້ານີ້ເອງແມ່ນ ເຊມຸຍແອນປິນ, ຜູ້ທຳອິດທີ່ທຳການສະແດງຢູ່ໃນໂຮງກາຍະສິນ "ໂກໂລເຊອູນ" ໃນເມືອງນີ້ດ້ວຍລາຍການ ...

ເວົ້າຮອດນີ້ຂ້າພະເຈົ້າກໍຢຸດຢູ່ຄາວຫນຶ່ງກ່ອນ, ແບບດຽວກັບອາຈານ ອາວເອເຣີເຄີຍແນະນຳໃຫ້ພວກຂ້າພະເຈົ້າຕອນຮຽນຢູ່ວິທະຍາໄລ "ກ່ອນທີ່ຈະວາງມັດຟ້າຜ່າ". ຂ້າພະເຈົ້າແນມເຫັນປາກທັງຫລາຍອ້າເບະອອກ, ພ້ອມດ້ວຍຮອຍຍິ້ມແບບສຽດສີ ແລະຫນ່ວຍຕາທີ່ຮີບຮໍ່ເຂົ້າຂອງທຸກຄົນທີ່ຢູ່ອ້ອມຂ້າງ. ບໍ່ຄວນແກ່ຍາວເວລາອີກແລ້ວ ຈະຕ້ອງໂມ່ງຫມັດຫນັກໂລດ.

- ... ລາຍການ "ຄົນເບົາກ່ວາອາກາດ"!

ບ່ອນທີ່ມວນຊົນນັ່ງຢູ່ນັ້ນໄດ້ມີສຽງໂຮ້ເຫລັ້ຂຶ້ນ. ຕັ່ງອີ້ຂອງພວກນັກຂ່າວກໍປະກົດວ່າດັງອອດໆແອດໆແຮງກ່ວາເກົ່າ. ທ່ານຜູ້ພິພາກສາ ສັ່ນກະດິງຂຶ້ນຄືບ້າຄືບ່ວງ.

- ຂ້າພະເຈົ້າປະກາດໂຈະຊົ່ວຄາວ! - ໃນທີ່ສຸດເພິ່ນກໍພະຍາຍາມແຜດສຽງຂຶ້ນໃຫ້ທຸກຄົນໄດ້ຍິນ.

ສະພາພິພາກສາເຂົ້າຫ້ອງປະຊຸມລັບ. ຄົນຜູ້ຫນຶ່ງທ່າທາງສຸພາບແລະໃຈດີຫຍັບເຂົ້າມາໃກ້ບ່ອນນັ່ງຂອງຂ້າພະເຈົ້າ ແລະເວົ້າວ່າ:

- ທ່ານຜູ້ພິພາກສາໄດ້ອະນຸຍາດໃຫ້ຂ້ອຍມາລົມກັບເຈົ້າ. ເຈົ້າຍັງອ່ອນຫລາຍ, ຍັງບໍ່ທັນມີປະສົບການພໍທີ່ຈະປັດເຂ່ຍບັນດາຄຳຜູກໂທດເປັນກອງໆນັ້ນໄດ້ດອກ. ຖ້າເຈົ້າຍັງຢາກມີຊີວິດຍືນຍາວອີກຕໍ່ໄປ ຂ້ອຍກໍຍິນດີທີ່ຈະຊ່ວຍເຈົ້າ. ຂ້ອຍຄືນັກກົດຫມາຍກິດວິນ, ຂ້ອຍຈະຕໍ່ສູ້ຄະດີຊ່ວຍເຈົ້າຢ່າງບໍ່ເອົາຄ່າ. ເຈົ້າເຊັນໃບອະນຸຍາດສາຕິ.



12–952

ຈາກທ່າທີທີ່ເຕັມໄປດ້ວຍຄວາມເຄົາລົບນັບຖືຂອງຄົນທີ່ຢູ່ອ້ອມຂ້າງສະແດງ ອອກຕໍ່ກິດ ວິນນັ້ນ, ພາໃຫ້ຂ້າພະເຈົ້າເຂົ້າໃຈວ່າຄົນບໍ່ມີເຫດຜົນຫຍັງຈະມາປະຕິເສດ, ແລະຂ້າພະເຈົ້າ ຈຶ່ງໄດ້ເຊັນຊື່ລົງໃສ່ເຈ້ຍນ້ອຍໃບຫນຶ່ງ. ຈາກນັ້ນກິດວິນກໍເອົາເຈ້ຍໃບນັ້ນໄປ.

ຫລັງຈາກນັ້ນຫ້ານາທີ ເພິ່ນກໍກັບມານັ່ງລົງຂ້າງໂຕະທີ່ຢູ່ເຊິ່ງຫນ້າກັບຂ້າພະເຈົ້າແລະຕໍ່ ຫນ້າທ່ານ ໄອຍະການໂດຍກົງໂລດ. ນັ່ງຢູ່ກ້ຳຊ້າຍແລະຂວາຂອງທ່ານ ກິດວິນ ຍັງມີຄົນອື່ນໆ ອີກສອງຄົນ. ເຂົາເຈົ້າເລີ່ມຕົ້ນດຶງປຶ້ມຄູ່ມື, ປຶ້ມປະມວນກົດຫມາຍຊຸດຕ່າງໆ, ປຶ້ມຂຽນ, ປຶ້ມບັນທຶກສ່ວນຕົວເຈ້ຍສໍແລະຄາວດງອເທົ່ານັ້ນ, ເທິງໂຕະຂອງເຂົາກໍເຕັມປຶກດ້ວຍເອກະ ສານຄືກັນກັບຢູ່ເທິງໂຕະໄອຍະການ.

ກິດວິນຫັນມາທາງຂ້າພະເຈົ້າ.

- ຂ້ອຍໄດ້ຕິດຕາມຟັງທຸກໆຄຳກ່າວຟ້ອງແລະບັນດາຂໍ້ຜູກໂທດແລ້ວ ອັນນີ້ມັນຈະແຈ້ງວ່າ ເປັນຄວາມພາດອັນໃຫຍ່ຫລວງ. ແລະຂ້ອຍກໍວ່າບໍ່ພຽງແຕ່ຕໍ່ເຈົ້າທໍ່ນັ້ນ. ເມື່ອເຈົ້າປະກາດຕໍ່ ສານນັ້ນ, ຂ້ອຍຮູ້ສຶກວ່າຄົນຄຶດກຶກແລ້ວ. ປະຈຸບັນນີ້ຈຳເປັນຕ້ອງເອົາຊະນະຄະນະພິພາກສາ ໃຫ້ໄດ້ຈັກນ້ອຍຂ້ອຍແລະພວກເພື່ອນຮ່ວມງານຂອງຂ້ອຍຈະລົງມືເຮັດວຽກນີ້ໃຫ້ໄດ້. ເຈົ້າບໍ່ ຈຳເປັນຈະສິ້ນເປືອງຄວາມເວົ້າ, ມີແຕ່ຕອບຊຸນສານສັ້ນໆກໍພໍ. ຖ້າຂ້ອຍຍົກມືຂວາຂຶ້ນລູບຜົມ ແລ້ວໃຫ້ເຈົ້າເວົ້າວ່າ "ຈ້າວ", ຖ້າຍົກມືຊ້າຍຂຶ້ນໃຫ້ວ່າ "ບໍ່". ການສູ້ຍັນທີ່ຈະມາເຖິງນີ້ບໍ່ມີຫຍັງ ຈະພິລຶກຫຶກຫນາພໍເທົ່າໃດດອກ. ຈົ່ງກ້າຫານຕື່ມ, ບິນເອີຍ. ສານພຽງແຕ່ພັກດື່ມນ້ຳດື່ມ ໃນຫນ້ອຍຫນຶ່ງແລ້ວກໍຈະສືບຕໍ່...

ຂ້າພະເຈົ້າບໍ່ອາດຫລົງລືມໄດ້ຈັກເທື່ອໃນຄຳປະກອບຄວາມເຫັນຂອງທະນາຍຄວາມຂ້າພະ ເຈົ້າໃນຂະນະທີ່ເພິ່ນວິພາກວິຈານຄຳເວົ້າຂອງຂ້າພະເຈົ້ານັ້ນ. ໂອ, ທ່ານນັກກົດຫມາຍ ກິດ ວິນຜູ້ນີ້ຈັ່ງແມ່ນເປັນຄົນທີ່ມີປະສົບການອີຫລີ! ເພິ່ນກ້າວອອກມາຢືນຢູ່ກາງຫ້ອງ, ຕໍ່ຫນ້າ ໂຕະຂອງໄອຍະການດ້ວຍທ່າທາງຂອງຄົນຜູ້ຫນຶ່ງທີ່ອາດສາມາດພິກແຜ່ນດິນປີ້ນ ແຜ່ນຟ້າໄດ້! ເພິ່ນເລີ່ມຕົ້ນດ້ວຍນ້ຳສຽງຄ່ອຍໆແລະອິດເມື່ອຍ:

- ໃນຊີວິດມັກມີກໍລະນີຕ່າງໆເຊິ່ງ...

ທົ່ວທັງຫ້ອງງຽບສະຫງັດ, ເຖິງຂັ້ນສາມາດໄດ້ຍິນສຽງທຸບກັນກ່ອງແກ່ງຂອງປ່ຽງໂລຫະທີ່

ໃຊ້ເປັນເຄື່ອງເອ້ທີ່ເກາະຢູ່ກັບສາຍໂມງຂອງກີດວິນ, ປະກົດວ່າສຽງດັງບ່ອນນັ່ງຂອງພວກເຫລົ່ານັ້ນພວມປະສານກັບຄວາມເວົ້າຂອງເພິ່ນ. ໃນນັກຂ່າວມີຄົນແຫຍ້ກັນຢູ່ຈົນເຕັມອັດ. ພວກນັກຂ່າວຈົດກ່າຍເອົາວັບໆ, ບໍ່ວາງບັນທຶກເລີຍ. ພວກນັກຖ່າຍຮູບຫລອຍມາຖ່າຍເອົາບ່ອນນັ້ນບ່ອນນີ້. ສ່ວນ ກີດວິນ ນັ້ນກໍເລີ່ມເຂັ້ມຂຸ້ນຂຶ້ນ. ເພິ່ນໃຊ້ຫລາຍສັງວາດແລະຮູ້ຈັກຢຸດບ່ອນທີ່ຄວນຈະຢຸດ, ປານກັບວ່າເພິ່ນພວມຫລິ້ນເຄື່ອງດົນຕີໃຫຍ່ຊະນິດຫນຶ່ງທີ່ມີຫລາຍສາຍນີ້ແຫລະ. ປີກເສື້ອຂອງເພິ່ນຍົກຂຶ້ນຍົກລົງໃນຂະນະທີ່ເພິ່ນງວາກມາຫາມວນຊົນເພື່ອດູດດຶງເອົາຄວາມສະຫນັບສະຫນູນ. ເຫື່ອເມັດໃຫຍ່ໆໄຫລກ້ຽຢູ່ເທິງແກ້ມຂອງເພິ່ນ, ສ່ວນຕາທັງຄູ່ນັ້ນຊ້ຳຮຸ່ງໃສຂຶ້ນ. ເພິ່ນໃຫ້ສັນຍານດ້ວຍທ່າທາງຂອງຄົນທີ່ມີບົດຮຽນແລະນິ່ມນວນທີ່ສຸດ. ແລະຫນຶ່ງໃນຈຳນວນພວກຊ່ວຍວຽກກໍໄດ້ສົ່ງປຶ້ມຄູ່ມືກົດຫມາຍທີ່ເປີດໄວ້ຮຽບຮ້ອຍນັ້ນ ໃຫ້ເພິ່ນໂລດ. ກີດວິນ ຈັບເອົາປຶ້ມຢ່າງຊຳນິຊຳນານອ່ານຂໍ້ມາດຕາກົດຫມາຍຕ່າງໆຫມົດໃນລວດດຽວ, ຈາກນັ້ນ ຈຶ່ງກົ້ມປຶ້ມລົງໃສ່ໂຕະແລ້ວເວົ້າດ້ວຍສຽງທີ່ກ້ອງ ກາງວານ. ຂະນະນັ້ນ ສຽງຂອງເພິ່ນປຽບດັ່ງສຽງແກຂອງເທວະດາອາກຄານແກັນ*.

- ຕ້ອງຕັດສິນໂລດວ່າ, ລາວແມ່ນໃຜແທ້...

ມືຂວາຂອງ ກີດວິນ ລູ້ຂຶ້ນຈົນຊື່ຂະຫມັບ. ຂ້າພະເຈົ້າຟັງຢ່າງເມົາມົວ, ແລະແຕ່ລະຄຳທີ່ນັກກົດຫມາຍເວົ້າອອກໄປນັ້ນຍິ່ງເຮັດໃຫ້ຂ້າພະເຈົ້າແນ່ໃຈວ່າຄົນຜູ້ທີ່ບໍ່ມີໂທດ ກຳຫຍັງຫມົດໃນໂລກນີ້ຄື ເຊມຸຍແອນບິນ.

- ຈ້າວ, ສານຈະຕ້ອງຕັດສິນດຽວນີ້ໂລດ... - ກີດວິນເວົ້າຢ່າງເດັດດ່ຽວ, ທັງຍົກມືຂວາຂຶ້ນມາກຳເອົາເປົ້າພົມກູດທີ່ປຽກຊຸ່ມໄປດ້ວຍນ້ຳເຫື່ອຂອງຕົນ ແລະກົ້ມແສງຕາອັນຮ້ອນປານໄຟລົນແລະກັງວາດມາເບິ່ງຂ້າພະເຈົ້າ.

- ກືກ! ກືກແລ້ວ! - ເມື່ອຄຶດເຖິງຄຳແນະນຳຂອງນັກກົດຫມາຍຂ້າພະເຈົ້າໃຊ້ຫມົດກຳລັງແຮງເປັ່ງສຽງໃຫ້ດັງກ້ອງຂຶ້ນ.

ເປັນອັນວ່າຂ້າພະເຈົ້າໄດ້ສະແດງບົດນັກດົດພິນ ແລະເສບປະສານກັບນັກຮ້ອງສຽງດີຜູ້ນັ້ນ.

---

* ອາກຄານແກັນ: ເທວະດາໃນຄຳພີ ຄາໂຕລິກ.

ກິດວິນ ເວົ້າຢູ່ເປັນເວລາສອງຊົ່ວໂມງກ່ວາ. ເພິ່ນມີສິດເຮັດແບບນີ້ ໂດຍອີງໃສ່ກົດໝາຍຂອງລັດທີ່ໄດ້ທຳການຕັດສິນຄະດີຂອງຂ້າພະເຈົ້ານັ້ນເອງ.

- ຂ້າພະເຈົ້າຮ້ອງຂໍໃຫ້ສານຈົ່ງກວດກາຄຳຢືນຢັນຂອງຜູ້ທີ່ຂ້າພະເຈົ້າໃຫ້ການປົກປ້ອງ ນັ້ນຄືນອີກວ່າລາວແມ່ນ ເຊມຸຍແອນປິນ ແທ້ ແຕ່ບໍ່ແມ່ນໃຜຜູ້ອື່ນ, ຜູ້ເຊິ່ງສອງປີກ່ອນນີ້ ເຄີຍໄດ້ສະແດງຢູ່ໃນໂຮງກາຍຍະສິນ "ໂກໂລເຊອູມ" ຂອງພວກເຮົາ, - ກິດວິນ ກ່າວມ້ອນທ້າຍດ້ວຍການເຮັດໃຫ້ບັນຍາກາດຄຶກຄັກຂຶ້ນກ່ວາເກົ່າ. - ທ່ານສຸພາບບຸລຸດ ແລະສຸພາບສັດຕີທີ່ຮັກແພງ, ຈົ່ງທວນຄືນເຖິງເຫດການໜຶ່ງ! ໃນໂລກນີ້ບໍ່ມີໃຜຈະສາມາດສະແດງລາຍການສ່ຽງຊີວິດນັ້ນໄດ້ ນອກຈາກຊາຍໜຸ່ມ "ເບົາກ່ວາອາກາດ" ຜູ້ນີ້, ລາວຜູ້ດຽວເທົ່ານັ້ນທີ່ຖືກເຄື່ອງຈັກອັບປີຊະນິດໜຶ່ງຍິງສົ່ງຂຶ້ນອາກາດເຊິ່ງບໍ່ມີບຸກຄົນໃດໃນຊຸມພວກເຂົານີ້ຈະຫລົງລືມໄດ້. ຕໍ່ຈາກລາວມາ, ມີຄົນຈຳນວນໜຶ່ງໄດ້ລອງສະແດງລາຍການນີ້ຄືນ, ແຕ່ກໍໜ້າເສຍດາຍທີ່ເຂົາເຈົ້າລ້ວນສະແດງໃຫ້ເຫັນມາວ່າໜັກກ່ວາອາກາດ... ແລະນີ້, ຜູ້ຊະນະເລີດທີ່ຍອດຍັງມທາງດ້ານຕີລັງກາປິ່ນໂຕ, ອີກຄັ້ງໜຶ່ງໄດ້ປະກົດຕົວຢູ່ຕໍ່ໜ້າພວກທ່ານນີ້ແລ້ວ. ລາວພວມຖືກກ່າວໂທດອັນພິລຶກຫຶກຫນາເດັ່ງຕັກໜັກຕຶ້ງຢູ່ເຕັມຫົວ ຄະດີຂ້າຄົນ. ວິນຍານຂອງຜູ້ຕາຍອ້ອນວອນຕໍ່ຟ້າ, ທວງໃຫ້ມີການແກ້ແຄ້ນ. ແຕ່ເຖິງຢ່າງນັ້ນກໍດີ, ມັນຈຳເປັນທີ່ຈະຕ້ອງເວົ້າຕື່ມວ່າ, ທ່ານ ໂຣນເຊີ ຕາຍໂດຍບໍ່ເຫັນຊາກ... ແຕ່ຢູ່ນີ້ ສຽງຮ້ອງຫາການຊ່ວຍຊູກູ້ຊີວິດຂອງຜູ້ບໍ່ມີໂທດກຳຫຍັງຊ້ຳພວມດັງກ້ອງ ກັງວານຢູ່. ຊາວໜຸ່ມຜູ້ນີ້ບໍ່ມີຄວາມຜິດ...

- ບໍ່! ບໍ່! - ຂ້າພະເຈົ້າເວົ້າຄືກັບຈະໄຫ້ສະອື້ນຂຶ້ນ, ເພາະກິດວິນ ພວມຊູມືຊ້າຍຂຶ້ນດຶງຜົມຢູ່ເທິງຫົວ.

- ປິນພຽງແຕ່ຮ້ອງຂໍຢ່າງດຽວຄືເປີດໂອກາດໃຫ້ລາວໄດ້ຢືນຢັນວ່າຕົນຄືປິນ ທີ່ແທ້ຈິງ.

ກິດວິນ ຊູມືຂວາຂຶ້ນກຳແຂບເສື້ອແລະເວົ້າຢ່າງລ່ຽນໄຫລ, ທັງຊັ່ງຊາໃນແຕ່ລະຄຳເວົ້າ:

- ຂ້າພະເຈົ້າສະເໜີໃຫ້ສານຈົ່ງຕອບສະໜອງແດ່ຄຳຮ້ອງຂໍຂອງຜູ້ຕ້ອງຫາ.

ດ້ວຍອາການມຶນເມື່ອຍອ່ອນເພຍ, ເພິ່ນນັ່ງເອະລົງຕັ່ງອີ້. ຂ້າພະເຈົ້າແນມເຫັນອາຍຮ້ອນທີ່ບິນຂຶ້ນຈາກຫົວຂອງເພິ່ນໄດ້ຢ່າງຊັດເຈນ ຂ້າພະເຈົ້າບ້າປ່ວງຂຶ້ນດ້ວຍຄວາມຫວັງທີ່ຈະໄດ້

ກອດຊິມເພີ່ນຢ່າງເຕັມອົກເຕັມໃຈ, ແຕ່ສຽງກະດິງຂອງຜູ້ພິພາກສາໄດ້ສະກັດກັ້ນຂ້າພະເຈົ້າເອົາໄວ້.

- ອີງໃສ່ການຕັດສິນນີ້... - ຜູ້ພິພາກສາເລີ່ມຕົ້ນດ້ວຍສຳນວນແບບນີ້, ແລະຂ້າພະເຈົ້າຮູ້ສຶກວ່າບໍ່ແມ່ນລາວເວົ້າ, ແຕ່ແມ່ນພວມຫຍ້ຳສິ່ງໃດສິ່ງໜຶ່ງ, ຄຳເວົ້າຂອງລາວຕິດພັນເຂົ້າຫາກັນຢ່າງພິດສະດານກາຍເປັນຮອຍແສ່ວທີ່ປານີດທີ່ສຸດ, ບາງຄາວກໍຍອກເຍີ້ຍ ກົດວິນ ຢ່າງຈຳເພາະເຈາະຈົງ, ຄອນໆກໍເຕືອງເກົງຊາຕາກຳຂອງຊາຍໜຸ່ມທີ່ພວມນອນຢູ່ໃນກຳມືຂອງສານ. ຜູ້ພິພາກສາຜູ້ນີ້ກໍເປັນຜູ້ຫລັກແຫລມແລະຮູ້ຈັກວິທີຕອບໂຕ້ເກັ່ງຜູ້ໜຶ່ງ. ສຽງຂອງລາວເລີ່ມດັງກ້ອງຫອງຂຶ້ນ ແລະມີຮູບປະທຳສະແດງອອກມາຢ່າງຈະແຈ້ງ. ຟັງລາວເວົ້າ, ບາງຄັ້ງປະກົດວ່າຂ້າພະເຈົ້າຖືກເຊີດຊູຂຶ້ນຈົນເຖິງຈອມຍອດແຫ່ງຄວາມຫວັງ, ບາງຄາວຊ້ຳຄືກັບຕົກຫວ່ຳລົງສູ່ເຫວເລິກແຫ່ງຄວາມສິ້ນຫວັງ. ແຕ່ພາຍຫລັງທີ່ກະແສຄວາມເວົ້າແບບຂູ່ຂວັນຂອງຜູ້ພິພາກສາດັງກ້ອງຂຶ້ນສູງຈົນຮອດຈຸດສຸດຍອດແລ້ວ, ທັນໃດນັ້ນລາວກໍຜ່ອນສຽງລົງ.

- ຂ້າພະເຈົ້າຂໍຕັດສິນວ່າ: ອະນຸຍາດໃຫ້ຜູ້ຕ້ອງຫາໄດ້ພິສູດຕົນເອງດ້ວຍວິທີສະແດງລາຍການທີ່ອັນຕະລາຍສ່ຽງຕໍ່ຄວາມຕາຍນັ້ນຢູ່ຕໍ່ໜ້າສານ.

## II

ການຕັດສິນຄະດີຂອງຂ້າພະເຈົ້າຖືກໂຈະໄວ້ສິບມື້. ໃນໄລຍະດັ່ງກ່າວຂ້າພະເຈົ້າຕ້ອງຕຽມຕົວສະແດງ. ແຕ່ມື້ທີ່ຂ້າພະເຈົ້າຖືກນຳຕົວຂຶ້ນສານມານີ້, ຊີວິດຂອງຂ້າພະເຈົ້າຢູ່ໃນຄຸກມີການປ່ຽນແປງດັ່ງເປລະມິດເອົາ.

- ໂອ້, ນ້ອຍເອີຍ, ມຶງບໍ່ໄດ້ແມ່ນນົກນ້ອຍທຳມະດາເດນໍ, - ດະຍຶກເຊີ ເວົ້າ, ພ້ອມທັງຍ່າງຕາມຫລັງ ຂ້າພະເຈົ້າມາໃນເຮືອນຈຳແລ້ວອັດຕູກົບ. - ນ້ອຍມຶງຈັບກົດວິນມາເທດໃຫ້ຜູ້ພິພາກສາຟັງຢ່າງໂງຄໍບໍ່ຂຶ້ນເລີຍ... ເກັ່ງຫລາຍ! ບາງທີ ມຶງອາດຈະຫິວ, ແມ່ນຕີ້ນ້ອຍ? ກູສັ່ງໃຫ້ເຂົາເຈົ້າເອົາເຂົ້າປາອາຫານເຂົ້າມາໃຫ້ແລ້ວ. ຫິວໜ້າພໍ່ຄົວຄົນນີ້ປຸງແຕ່ງອາຫານເກັ່ງຢູ່ໃດ. ຕອນນີ້ ມຶງກະສັ່ງອາຫານເລີຍສາ, ນ້ອຍ ມື້ແລງຢາກກິນຫຍັງ...

ຂ້າພະເຈົ້າຍິ້ມຢ່າງຂົມຂື່ນ:

- ລຸງ ດະຍິກເຊີ ທີ່ຮັກແພງ, ເຈົ້າເຍີຍຂ້ອຍຫວະນີ້?

ລຸງໂນໂຫຂຶ້ນ.

- ເຍີຍບັກສິບລະບິນ. ເຍີຍຜູ້ຊະນະເລີດຊັ້ນຫວະ? ກູບໍ່ມີສັນດານແບບນັ້ນດອກ. ກູມີລູກຊາຍສອງຄົນ - ທັງສອງລ້ວນແຕ່ເປັນນັກກິລາ. ເມື່ອກັບຈາກໄປຊົມການສະແດງຄັ້ງທຳອິດຂອງມຶງທີ່ໂຮງກາຍຍະສິນ "ໂກໂລເຊອູມ" ນັ້ນ, ພວກເຂົາກໍໄດ້ແຕ່ຝັນເຖິງ"ຄົນເບົາກວ່າອາກາດ" ຢູ່ບໍ່ແລ້ວບໍ່ທົ່ວ. ນີ້ນ້ອຍເອີຍ. ເປັນໄປໄດ້ບໍ່ວ່າ ຊີວິດບໍ່ເຄີຍສອນໃຫ້ມຶງບໍ່ມີຄວາມແປກໃຈຕໍ່ການປ່ຽນແປງຢ່າງກະທັນຫັນເລີຍ?

ເຂົາເຈົ້າຈັດແຈງສະບຽງອາຫານອັນບໍລິບູນພູນລົດມາຄາບຫນຶ່ງ. ຂ້າພະເຈົ້າກິນໄດ້ກິນເອົາປານງູອຶກຊູກິນຫນູນ້ອຍເອົາໂລດ.

ດະຍິກເຊີ ກວດກາເບິ່ງເຮືອນຈຳດ້ວຍທ່າທາງບໍ່ພໍໃຈ.

- ຢູ່ຂ້າງນີ້ມີບ່ອນຫວ່າງດີໆຢູ່ບ່ອນຫນຶ່ງ. ຄົນສະຫລາດຫລັກແຫລມຜູ້ຫນຶ່ງເຄີຍໄຊ້ຊີວິດຢູ່ນັ້ນມາແລ້ວເຄິ່ງປີ, ລາວສາມາດປົກປ້ອງຕົນເອງຢູ່ຕໍ່ຫນ້າສານ ເຖິງແມ່ນເພິ່ນຈະຈັບຂອງກາງໄດ້ຄາຕີນຄາມືຂະນະທີ່ຈູດຕູ້ນິລະໄພທະນາຄານກໍຕາມ. ກູຫວັງວ່າການຍ້າຍໄປສູ່ຫ້ອງຈຳຫ້ອງນັ້ນຄົງຈະນຳເອົາຄວາມສຸກອັນແທ້ຈິງມາໃຫ້ມຶງ ນ້ອຍເອີຍ ...

ຫລັງຈາກກິນເຂົ້າທ່ຽງແລ້ວ, ຂ້າພະເຈົ້າກໍຍ້າຍໄປຢູ່ທີ່ຫ້ອງຂັງດັ່ງກ່າວ. ຢູ່ຫັ້ນມີໂຕະ, ຕັ່ງຈິບງາມ, ຕຽງກໍປູເສື່ອ, ອ່າງລ້າງຫນ້າກໍເຮັດດ້ວຍຫີນລາຍດອກ. ຍັງແຕ່ຂາດຮູບແຕ້ມຂອບສີຄຳເທົ່ານັ້ນແລ້ວ.

ຂ້າພະເຈົ້ານັ່ງລົງເທິງຕັ່ງເບາະນວມທີ່ອ່ອນນຸ້ມນັ້ນດ້ວຍຄວາມຊົມຊື່ນແລະສະເຫນີຂຶ້ນວ່າ:

- ລຸງ ດະຍິກເຊີ, ລຸງລອງຫລິ້ງຫູໃຫ້ຂ້ອຍຕື່ນຈັກບາດແດ່ເທາະ. ມີຫຍັງເກີດຂຶ້ນເກາະລຸງ?

ນາຍທຳມະໂລງຍິ້ມຫົວຢ່າງສົດຊື່ນ:

- ນ້ອຍເອີຍ, ເລື່ອງນີ້ມັນສັ່ນຟ້າສະເທືອນດິນແລ້ວ. ຈັ່ງແມ່ນມຶງໂຊກດີ. ດຽວນີ້ ຫນັງ

ສືພິມຕ່າງໆມີແຕ່ເວົ້າກ່ຽວກັບມຶງທັງນັ້ນ. ຮ້ວາຍ, ແນວ "ຄົນເບົາກ່ວາອາກາດ" ເວີຍ! ມຶງຕຽມພ້ອມທີ່ຈະຮັບແຂກເຂົ້າພົບບໍ່ລະ?

- ກິດວິນຫວະ?

- ນອກຈາກພວກນັກກົດຫມາຍແລ້ວ, ຍັງມີນັກຂຽນສາລະຄະດີເອີ່ຍ? ນັກຂ່າວເອີ່ຍ? ພວກນັກປັ້ນເລື່ອງມ່ວນເອີ່ຍ? ພວກຊ່າງພາບເອີ່ຍ? ພວກກ່າຍທຳຮູບເງົາເອີ່ຍ? ຢ່າຊິປ່ອຍໃຫ້ເຂົາກ່າຍຮູບເອົາໂດຍບໍ່ຈ່າຍເງິນເດີ ຈຶ່ງເອົາແພບັງຫນ້າໄວ້. ບາດແລ້ວ ເຂົາເຈົ້າຈະປ່ອນເງິນອອກມາໂລດດອກ...

ກ້າແມ່ນໃນກໍລະນີອື່ນຂ້າພະເຈົ້າອາດຈະສາມາດຫົວຂວັນຕໍ່ຄຳເຕືອນເຫລົ່ານັ້ນຂອງ ດະຍິກເຊີກໍໄດ້. ແຕ່ການເປັນໄປຂອງມັນເວົ້າແທ້ແລ້ວແມ່ນເຄັ່ງຂຶມສົມຄວນ. ຂ້າພະເຈົ້າບໍ່ສົງໄສເລີຍວ່າ: ຄຳປະກາດຂອງຂ້າພະເຈົ້າໄດ້ກໍ່ຄວາມຕື່ນເຕັ້ນໃຫ້ແກ່ມວນຊົນສາແລ້ວ. ແຕ່ແລ້ວ, ອີກສິບນາທີຕໍ່ມາ ຂ້າພະເຈົ້າກໍຕ້ອງເຂົ້າໄປນອນຢູ່ໃນເຄື່ອງຈັກຍິງສົ່ງ-ນັ້ນຄືບັນຫາທີ່ເຮັດໃຫ້ຂ້າພະເຈົ້າສງວສະຫຍອງຢ່າງຍິ່ງ.

ຈາກນັ້ນ, ກິດວິນ ກໍມາພ້ອມກັບຜູ້ອື່ນອີກສອງຄົນ.

- ຈັ່ງໃດປິນ, ເຈົ້າພວມສ້າງຄວາມສົນໃຈຂຶ້ນມາອີກແລ້ວແມ່ນຫວະ! -ຫນຶ່ງໃນສາມຄົນດັ່ງກ່າວເດ່ມືມາໃຫ້ຂ້າພະເຈົ້າກ່ອນທີ່ເຂົາເຈົ້າຈະຍ່າງເຂົ້າມາໃນເຮືອນຈຳ. ເຂົາຜູ້ນັ້ນຄືທ່ານຜູ້ອຳນວຍການໂຮງກາຍຍະສິນ "ໂກໂລເຊອູມ". ລາວມີຄວາມຕື່ນເຕັ້ນຢູ່ບໍ່ແລ້ວບໍ່ທົ່ວເປັນຈັກເທື່ອ. -ໂທ້, ເຈົ້າສ້າງຄວາມເສຍຫາຍໃຫ້ຂ້ອຍບໍ່ຈັກວ່າເທົ່າໃດ ເມື່ອການສະແດງກຶກຕັດສະບັ້ນລົງຢ່າງກະທັນຫັນ! ແຕ່ຂ້ອຍກໍໄດ້ປະກາດຕໍ່ມວນຊົນ: "ແລ້ວລາວຈະກັບມາດອກ".

- ນີ້ຄືທ່ານຫມໍ ວິນສັນ, -ກິດວິນແນະນຳອີກຜູ້ຫນຶ່ງຕໍ່ຂ້າພະເຈົ້າ. ເບິ່ງລາວເປັນຄົນທີ່ແຂງກະດ້າງແລະເຄັ່ງຄັດ. ຄີງຂອງລາວກຶກຮັດຮີງໄວ້ໃນເສື້ອຄຸມຍາວ. -ດຽວນີ້ ພວກເຮົາຈະບໍ່ປະໂອກາດມີຄ່າໄປລ້າງ ເລື່ອງມັນເປັນຈັ່ງຊີ້, ພວກເຮົາບໍ່ໄດ້ສົງໄສຫຍັງເລີຍວ່າເຈົ້າ ຄືປິນແທ້. ການທີ່ເຈົ້າໄດ້ສະແດງເກມໂດດທີ່ໂດງດັງນັ້ນມັນກໍແຈ່ມແຈ້ງພໍແຮງແລ້ວ. ແຕ່ປະຈຸບັນນີ້ ເຈົ້າຈະຕ້ອງສະແດງລາຍການດັ່ງກ່າວຄືນຕໍ່ຫນ້າສານອີກ...

- ຂ້າພະເຈົ້າຕ້ອງ, - ຂ້າພະເຈົ້າຫັນໃຈໃຫຍ່, ສາລະພາບວ່າຄົນໄດ້ກໍ່ເລື່ອງສັບສົນໃຫ້ແກ່ໂຕເອງແລ້ວ.

ກິດວິນຖາມ:

- ທ່ານຜູ້ອຳນວຍການ. ເຄື່ອງຈັກສິ່ງນັ້ນຍັງດີຢູ່ແມ່ນບໍ່?

ຜູ້ອຳນວຍການງຶກຫົວ:

- ບໍ່ມີການຄາດເຄື່ອນຫຍັງເລີຍ.

- ກລີບເດລະ? - ຂ້າພະເຈົ້າຖາມ.

ຜູ້ອຳນວຍການກົ້ມແນມລົງຕ່ຳ.

- ບິນ, ຕອນນີ້ ຢ່າຟ້າວຖາມເຖິງລາວເທື່ອ. ມີບາງຢ່າງທີ່ບໍ່ສາມາດ ...

ກິດວິນໂບກມືໄປໃສ່ຜູ້ອຳນວຍການ.

- ຂໍທ່ານຢ່າໄດ້ເວົ້າເຖິງເລື່ອງມະລຳມະລອຍຢູ່ອີກ. ຈົ່ງ ກວດເບິ່ງວ່າບິນພ້ອມທີ່ຈະສະແດງໄດ້ແລ້ວບໍ່ ... ຈັກສິ່ງຂອງທ່ານຮັບປະກັນນ້ຳຫນັກເກີນສຸດຍອດໄດ້ເທົ່າໃດ?

- ບໍ່ເກີນເຄິ່ງປອນ ຫລືບາງທີອາດຈະຕ່ຳກ່ວານັ້ນອີກ ...

ກິດວິນທັງເຊັດເຫື່ອມືທັງແລ່ນໄປແລ່ນມາຢູ່ໃນຫ້ອງຢ່າງວິຕົກກັງວົນ.

- ນີ້, ທ່ານເຫັນດີ ... ຕ້ອງເຮັດຈັ່ງໃດໃຫ້ນ້ຳຫນັກຂອງ "ຄົນເບົາກວ່າອາກາດ" ນີ້ດຸ່ນດ່ຽງກັບແຮງຍັນຂອງລໍຊໍເຄື່ອງສິ່ງ. ທ່ານ ວິນສັນ ຊ່ວຍກວດສຸຂະພາບໃຫ້ລາວແດ່. ບິນ, ແກ້ເຄື່ອງອອກ ...

ຂ້າພະເຈົ້າແກ້ເຄື່ອງນຸ່ງ. ທັງສາມຄົນພ້ອມກັນກວດກາເບິ່ງຮ່າງກາຍຂອງຂ້າພະເຈົ້າແຕ່ຫົວສຸດຕີນ, ເຂົາເຈົ້າບີບໆຄັ້ນໆເບິ່ງກ້າມຊີ້ນຢູ່ແຂນຂາຂອງຂ້າພະເຈົ້າ. ທ່ານຫມໍໃຊ້ເຊືອກແມັດແທກຕົວຂອງຂ້າພະເຈົ້າທາງຕັ້ງແລະທາງຂວາງ, ລາວພືມພຳທັງຄຶດໄລ່ພາງໆໃນສະຫມອງແລ້ວສະຫລຸບດັ່ງນີ້:

- ນ້ຳຫນັກຂອງລາວຂາດຢູ່ຫົກປອນ ...

- ຄັນຊັ້ນກໍຫມາຍຄວາມວ່າເຄື່ອງຈັກສິ່ງຊິດັນລາວຂຶ້ນຈົນຖຶງເພດານໂຮງສະແດງພຸ້ນແລ້ວ, - ຜູ້ອຳນວຍການເວົ້າຢ່າງຄັ້ນຄຶດ. - ຈະຕ້ອງປ່ຽນລໍຊໍ ...

- ພວກເຮົາຈະເຮັດໃຫ້ລາວຕຸ້ຍຂຶ້ນ, - ທ່ານໝໍເວົ້າຢ່າງເຄັ່ງຄັດ. - ຕ້ອງຈຳໃຫ້ລາວກິນອາຫານຕາມອັດຕາທີ່ຂ້າພະເຈົ້າສັ່ງເປັນຕົ້ນທາດຫວານ, ໂປຣຕີນແລະນ້ຳມັນຈັກນ້ອຍ. ນວດຮ່າງກາຍໃຫ້ລາວມື້ລະສອງເທື່ອ. ກວດການ້ຳໜັກໃຫ້ເປັນປົກກະຕິ, ແລະຝຶກແອບກາຍ...

ຜູ້ອຳນວຍການໄດ້ປະກາດຕື່ມວ່າ:

- ຂ້າພະເຈົ້າມອງເຫັນບັນຫາໄວ້ລ່ວງໜ້າແລ້ວ ແລະໄດ້ຈັດແຈງທຸກຢ່າງຮຽບຮ້ອຍ.

ແລ້ວກິດວິນຫົວຢ່າງຊິມຊື່ນ:

- ຄັນຊັ້ນຂ້າພະເຈົ້າກໍອຸ່ນອ່ຽງໃຈນຳທີ່ສຸດ. ຕ້ອງດຳເນີນການຝຶກຊ້ອມໄປເລີຍ...

"ເງິນຄືແກ້ວສາລະພັດນຶກ", - ຄຳສຸພາສິດອັນເຄີຍເວົ້າໄວ້ແບບນີ້. ເງິນຂອງທ່ານຜູ້ອຳນວຍການໄດ້ຫັນປ່ຽນຫ້ອງຂັງຂ້າພະເຈົ້າມາເປັນແຫລ່ງລວມສູນອັນໜຶ່ງ ຢ່າງບໍ່ເຄີຍເຫັນມາກ່ອນ, ມັນທັງເປັນສະຖານທີ່ພັກຜ່ອນບຳລຸງກາຍ, ທັງເປັນຫ້ອງຝຶກຊ້ອມກິລາ. ພວກກຶກກັກຂັງນຳເອົາຊີງທີ່ທ່ຽງຕົງມາແລະຕັ້ງຮາວສຳລັບໂຫນໂຕຂຶ້ນໃນທີ່ແຫ່ງນີ້. ຂ້າພະເຈົ້າໄດ້ໃສ່ຊຸດນຸ່ງຢູ່ເຮືອນທີ່ອົບອຸ່ນຍິ່ງ, ທັງໄດ້ກິນເຂົ້າແຊບແລະເພີ່ມນ້ຳໜັກໃຫ້ແກ່ຕົນເອງ. ຫລັງຈາກນັ້ນ ເຂົາເຈົ້າກໍນວດໃຫ້ຂ້າພະເຈົ້າ; ຂ້າພະເຈົ້າໄດ້ພັກຜ່ອນ, ຝຶກຊ້ອມຕາມຕາຕະລາງເວລາແລະມີຄວາມພູມໃຈເມື່ອເຫັນວ່າກ້າມຊີ້ນຂອງຕົນໄດ້ຕຶງເຕັມແລະແໜ້ນແກ່ນຂຶ້ນ. ແຕ່ລະມື້ ທ່ານ ກິດວິນ, ທ່ານຜູ້ອຳນວຍການແລະທ່ານໝໍ ວິນສັນ ໄດ້ມາຢ້ຽມຂ້າພະເຈົ້າຢູ່ເປັນປະຈຳ.

ສ່ວນຢູ່ເບື້ອງນອກ, ເບື້ອງຝາຄຸກທັງສີ່ດ້ານນັ້ນ ທະເລຊີວິດຍັງຄົງຟາດຄື້ນຕີຟອງຄຶ້ມໆຢູ່, ແລະສຽງຂອງຄື້ນໃຫຍ່ຟອງແຮງນັ້ນໄດ້ກ້ອງສະນັ່ນມາເກືອງໂສດປະສາດຂອງຂ້າພະເຈົ້າເປັນຄັ້ງຄາວ. ພວກທີ່ມັກສີລະປະກາຍຍະສິນທັງຫລາຍຕ່າງກໍຝາກດອກໄມ້ມາໃຫ້ຂ້າພະເຈົ້າ. ເກືອບເວົ້າໄດ້ວ່າຫ້ອງຂັງໄດ້ກັບກາຍມາເປັນເຮືອນແກ້ວປູກດອກໄມ້. ມີຈົດໝາຍແລະໂທລະເລກຫລາຍສະບັບທີ່ສະຫລັກຊື່ຂອງຂ້າພະເຈົ້າ, ແຕ່ດະຍິກເຊີ ໄດ້ຮັບຄຳສັ່ງເດັດຂາດຄືຫ້າມບໍ່ໃຫ້ສິ່ງຈົດໝາຍຕ່າງໆເຫລົ່ານັ້ນເຂົ້າມາລົບກວນຂ້າພະເຈົ້າ, ອີກຢ່າງໜຶ່ງຂ້າພະເຈົ້າກໍບໍ່ມີເວລາຈະອ່ານຈົດໝາຍລາຍເລກເຫລົ່ານັ້ນດອກ. ມີເທື່ອໜຶ່ງ, ທີ່ໝໍນວດຫລັງປະ

ຫນັງສືພິມສະບັບຫນຶ່ງໄວ້ຢ່າງບໍ່ເຈດຕະນາແລະຂ້າພະເຈົ້າເລີຍໄດ້ອ່ານສິ່ງຕ່າງໆທີ່ກ່ຽວຂ້ອງເຖິງຂ້າພະເຈົ້າ.

ຄະນະບັນນາທິການລົງພິມເລື່ອງຈິງຄືນແທ້ບົດຫນຶ່ງ: ກ່ອນນີ້ສອງປີ ເສດຖີໂດ່ງດັງຜູ້ຫນຶ່ງຄືຄົບຄາກ ໄດ້ຊື້ເຄື່ອງຈັກຄົບຊຸດເພື່ອສະແດງລາຍການທີ່ອັນຕະລາຍຫາຍຍະນະ "ຄົນເປົາກ່ວາອາກາດ" ນັ້ນຈາກຄະນະອຳນວຍການໂຮງກາຍຍະສິນ "ໂກໂລເຊອູມ" ແລະໄດ້ເຊື້ອເຊີນພວກທີ່ຢາກສະແດງລາຍການແບບຂ້າພະເຈົ້ານັ້ນຕັ້ງຫລາຍຄັ້ງຫລາຍເທື່ອ. ແຕ່ວິລະບຸລຸດທັງເກົ້າລ້ວນແຕ່ຕາຍໄປຕາມໆກັນເພາະສັກຫົວລົງໃສ່ແຜ່ນພະສຸທາຢູ່ທາງຂ້າງກະທັງນັ້ນ. ເສດຖີຜູ້ເຜົາເມືອນຳເກມກິລາສ່ຽງໄພນັ້ນເອງ ທີ່ເປັນຜູ້ພໍໃຈຍິ່ງກັບເກມຫລິ້ນກະຕຸກເສັ້ນດັ່ງກ່າວ. ເພິ່ນພວມຊອກຫາຄົນຜູ້ທີ່ສືບຢູ່, ແຕ່ໄດ້ຫນຶ່ງປີມາແລ້ວ ທົ່ວທັງພິພົບຫນ່ວຍນີ້ ແມ່ນບໍ່ສາມາດຈະຊອກຄົນຜູ້ທີ່ກ້າຂຶ້ນໄປນອນຢູ່ເທິງເຄື່ອງຈັກຍິງສົ່ງນັ້ນໄດ້ເລີຍ. ແນ່ນອນ ທ່ານຄົບຄາກ ບໍ່ເຄີຍສົງໃສເລີຍວ່າຜູ້ຕ້ອງຫານີ້ເອງຄື ແຊັມປ້ຽນ ເຊິ່ງເມື່ອກ່ອນນີ້ເຄີຍສັກຫົວລົງຖືກຈຸດໃຈກາງຂອງກະທັງຢ່າງປີຊາສາມາດມາແລ້ວຄັ້ງຫນຶ່ງ.

ແຕ່ແລ້ວ, ມາບັດນີ້ ທ່ານຄົບຄາກ ກໍເກີດມີຄວາມສຸກໃຈຍິ່ງເພາະໃນທີ່ສຸດລາວກໍສາມາດພົບກັບວິລະບຸລຸດຜູ້ທີ່ສືບ. ທ່ານ ຄົບຄາກ ໄດ້ບໍລິຈາກເງິນຈຳນວນສິບພັນດອນລ່າໃຫ້ແກ່ສະມາຄົມ "ເອັກວີແຕັບ" ເພື່ອປະກັນໄພໃຫ້ແກ່ຜູ້ກ້າຫານ. ທ່ານຄົບຄາກ ບໍ່ໄດ້ຫວາດຫວັ່ນຕໍ່ການໃຊ້ຈ່າຍ. ເພິ່ນຍອມຈ່າຍຄ່າເສຍຫາຍທຸກຢ່າງກ່ຽວກັບການເປີດສານພິພາກສາຢູ່ທີ່ໂຮງກາຍຍະສິນ "ໂກໂລເຊອູມ" ແລະກໍແມ່ນເພິ່ນເອງຈະເປັນຜູ້ກົດປຸ່ມເຄື່ອງຈັກຍິງເພື່ອສົ່ງບຸລຸດຜູ້ເຊິ່ງເອີ້ນວ່າ ປີນ ນັ້ນຂຶ້ນສູງເຖິງ ຫນຶ່ງຮ້ອຍຊາວສາມຈຸດສາມຟຸດຢູ່ຕໍ່ຫນ້າທ່ານຜູ້ພິພາກສາ ແລະສະພາພິພາກສາ. ເຂົາເຈົ້າແຈ້ງການມາວ່າ ກະທັງທີ່ມີຄວາມສຳຄັນຍິ່ງຢູ່ເບື້ອງລຸ່ມນັ້ນຈະບັນຈຸນ້ຳເກືອທະເລ ໂດຍແມ່ນຫ້ອງທົດລອງຂອງບໍລິສັດເຄມີ "ກອັກວາເຣີ ລິມິແທັດ" ເປັນຜູ້ຜະລິດຕາມໃບສັ່ງພິເສດ, ແລະນ້ຳຫນັກສະເພາະຂອງນ້ຳນັ້ນແມ່ນ ໑, ໗໑ ໃນອຸນນະພູມ ໔໕ ອົງສາແອັບ.

# III

ເຖິງມື້ທີ່ສິບເອັດ, ກໍ່ອີງຕາມການຕົກລົງຂອງສານແລ້ວ, ເຂົາເຈົ້າຈະເປີດສານ ເພື່ອພິພາກສາຄະດີຄາດຕະກຳ ໂຮບເຊີຢູ່ທີ່ໂຮງກາຍຍາສິນ "ໂກໂລເຊອູມ". ຄົບຄາກ ໄດ້ຈັດບ່ອນນັ່ງໃຫ້ຄະນະພິພາກສາຢູ່ເທິງເວທີສະແດງໂດຍກົງ. ແຕ່ເສດຖີ ຜູ້ໄດ້ເຊົ່າໂຮງກາຍຍະສິນຂອງຜູ້ອຳນວຍການໃນວັນນັ້ນ, ບໍ່ຢາກເສຍເງິນໄປຢ່າງໄຮ້ປະໂຫຍດຍ້ອນຄວາມມັກໃນເກມຫລິ້ນທີ່ອັນຕະລາຍຫາຍຍະນະຂອງຕົນນັ້ນເລີຍ. ລາວອະນຸຍາດໃຫ້ສານເຊົ່າສະເພາະແຕ່ບ່ອນນັ່ງຢູ່ເທິງເວທີເທົ່ານັ້ນ, ດ້ວຍເຫດນັ້ນ ປະຊາຊົນຜູ້ໃດຢາກເບິ່ງກໍຕ້ອງຈ່າຍເງິນຕື່ມສອງ - ສາມເທົ່າຕົວ ຈຶ່ງສາມາດໄດ້ເຂົ້າໄປນັ່ງຢູ່ຕາມບ່ອນນັ່ງຕ່າງໆ ນັບຕັ້ງແຕ່ແຖວລຸ່ມຈົນຖຶງແຖວເທິງສຸດ.

ເມື່ອຂ້າພະເຈົ້າຍ່າງອອກສູ່ເວທີດ້ວຍເຄື່ອງນຸ່ງຖືອັນງ່າຍດາຍ ຂອງກະລາສີເຮືອກຳປັ່ນ "ບຸກຊຸກ" ເຊິ່ງເພື່ອນຮ່ວມກຳປັ່ນຄົນຫນຶ່ງຝາກໄປໃຫ້ຢູ່ໃນຄຸກນັ້ນ, ທົ່ວທັງໂຮງກາຍຍະສິນກໍໄດ້ມີການໂຮ່ເຫລັກັນຂຶ້ນດ້ວຍຄວາມນິຍົມຊົມຊອບຕ່າງໆນາໆ. ພວກທີ່ນັ່ງແຖວລາຄາຖືກສຸດກໍຮ້ອງໂຮມາໃສ່:

- ເຮີຍ, ບົບ, ຈົ່ງກ້າຫານ!..

ທ່ານ ຜູ້ພິພາກສາສັ່ນກະດິ່ງ. ແຕ່ສຽງກະດິ່ງອັນບອບບາງນັ້ນ ຖືກຈົມລົບໄປໃນຫ້ອງອາກາດອັນກວ້າງຂວາງຂອງໂຮງສະແດງດັ່ງສຽງວິ່ງແວ່ງຂອງແມງວັນຢູ່ເທິງຫ້ອງທົ່ງ ທີ່ກວ້າງໄກໄພສານນັ້ນແລ້ວ.

ສານຕັ້ງຢູ່ບ່ອນຫນຶ່ງທີ່ສະດວກສະບາຍ, ອ້ອມຂ້າງສານແມ່ນພວກສະຫມຽນບັນທຶກ, ພວກພິມດີດ, ພະນັກງານຫ້ອງການແລະສາລະວັດ. ໃນຮ່ອມທາງທຽວຕ່າງໆເຕັມອັດໄປດ້ວຍຊ່າງພາບແລະນັກຖ່າຍຮູບເງົາ.

ຄະນະອຳນວຍການສັ່ງໄຕ້ໄຟຂຶ້ນທຸກດອກ. ໃນບ່ອນນັ່ງຂອງນັກຂ່າວແຫ່ງຕ່າງໆນັ້ນ ເຂົາເຈົ້າຍັດແຫຍ້ກັນຢູ່. ເຄື່ອງໂທລະພິມສອງສາມອັນກຽມພ້ອມສົ່ງຂ່າວຄາວກ່ຽວກັບການພິພາກສາຄັ້ງນີ້ໄປຍັງນິວຢອກ, ວໍຊິງຕັນ ແລະເອີລົບ ເປັນທີ່ແຈ່ມແຈ້ງວ່າພາຫະນະຂ່າວສານທຸກຢ່າງແມ່ນຢູ່ໃນທ່າຕຽມພ້ອມ.

ຢູ່ຕໍ່ຫນ້າສານນັ້ນ ແມ່ນກະຖາງບັນຈຸນ້ຳແລະອູ່ຂອງເຄື່ອງຍິງສິ່ງເຊິ່ງຂ້າພະເຈົ້າຮູ້ດີມາແລ້ວ.

ທ່ານຜູ້ພິພາກສາປະກາດຂຶ້ນວ່າ:

- ການພິພາກສາຄະດີຄັ້ງໃຫມ່ເລີ່ມຕົ້ນ. ຈຳເລີຍຈະຢືນຢັນເຖິງຄວາມຕັ້ງໃຈທີ່ຢາກຈະພິສູດຕົວເອງວ່າເປັນ ເຊມຸຍແອນປິນ ຫລືບໍ່?

ທົ່ວທັງໂຮງສະແດງ "ໂກໂລເຊອູມ" ງຽບບັດໄປ ເພາະເພື່ອລໍຟັງຄຳຕອບຂອງຂ້າພະເຈົ້າ.

- ແນ່ນອນ, ຮຽນທ່ານຜູ້ພິພາກສາ, ຂ້າພະເຈົ້າເຫັນພ້ອມແລະພ້ອມທີ່ຈະພິສູດຕົວຂອງຂ້າພະເຈົ້າເອງນະບັດນີ້ໂລດ, - ຂ້າພະເຈົ້າເວົ້າດັງໆແລະເຂັ້ມງວດ.

ກິດວິນຢືນຂຶ້ນ:

- ຂ້າພະເຈົ້າສະເຫນີພັກຜ່ອນຄາວຫນຶ່ງກ່ອນ. ຈຳເລີຍມີຄວາມຈຳເປັນຈະຕ້ອງປ່ຽນເຄື່ອງນຸ່ງທີ່ເຫມາະສົມ. ລາວບໍ່ສາມາດຈະດຳເນີນລາຍການໄດ້ໃນຊຸດເຄື່ອງນຸ່ງຄັບຊຶ່ງຈະເປັນການຂັດຂວາງໃຫ້ແກ່ລີລາການສະແດງຕ່າງໆ.

ທົ່ວໂຮງສະແດງມີສຽງໂສ້ເຫລັກັບຂຶ້ນອີກ.

ສານໄດ້ເຮັດຕາມຄຳຮຽກຮ້ອງຂອງນັກກົດຫມາຍ ຜູ້ທຳຫນ້າທີ່ເປັນທະນາຍຄວາມນັ້ນ, ແລະປະກາດພັກຜ່ອນຄາວຫນຶ່ງ.

ສາລະວັດນຳຕົວຂ້າພະເຈົ້າໄປຍັງເບື້ອງຫລັງຜ້າກັ້ງປິກບ່າງ.

ເປັນອັນວ່າ ອີກຄັ້ງຫນຶ່ງຂ້າພະເຈົ້າໄດ້ມາຢືນຢູ່ໃນຫ້ອງກ່າຍເຄື່ອງເຊິ່ງເມື່ອກ່ອນນີ້ ຂ້າພະເຈົ້າເຄີຍໄດ້ປີນລອດປະຕູປ່ອງຢ້ຽມຂອງມັນ, ເພື່ອປິບຫນີໄປ. ຫລັງຈາກທີ່ປີນລອດປ່ອງຢ້ຽມເຮືອນຫລັງນີ້ໄປແລ້ວ ຂ້າພະເຈົ້າຈຳຕ້ອງຜ່ານເສັ້ນທາງທີ່ສັບສົນສຸດຂີດເສັ້ນຫນຶ່ງເພື່ອຈະໄດ້ກຶກນຳຕົວມາແຫ່ງນີ້ອີກຄັ້ງຫນຶ່ງໂດຍຜ່ານທາງປະຕູໃຫຍ່! ເປັນອັນວ່າ ໂຊກຊາຕາໄດ້ຢອກເຢີ້ຍຂ້າພະເຈົ້າ. ເຫດການຈະເປັນໄປຈັ່ງໃດ, ຖ້າຂ້າພະເຈົ້າຫາກບໍ່ສັກຫົວລົງກຶກກະກຸງນ້ຳແຕ່ຊ້ຳໄປສັກຫົວກົງງລົງໃສ່ທ່ານຜູ້ພິພາກສາ? ຖ້າເປັນເຊັ່ນນັ້ນ ຂ້າພະເຈົ້າກໍຄົງຈະເຕັງລາວ, ຈົນຄໍຫັກໄປ, ພ້ອມກັນທັງສອງຄົນກໍເປັນໄດ້?

ຂ້າພະເຈົ້າຄຶດຈັ່ງຊີ້ ໃນຂະນະທີ່ພວກຮັບຜິດຊອບແຕ່ງກາຍພວມນຸ່ງເຄື່ອງຊຸດຂອງນັກສະແດງກາຍຍະສິນເຊິ່ງເຮັດດ້ວຍແພໄຫມນັ້ນໃຫ້ຂ້າພະເຈົ້າຢູ່ຢ່າງງຽບໆພາຍໃຕ້ການຄວບຄຸມຂອງ

ພວກສາລະວັດ. ເຂົາເຈົ້າລ້ວນແຕ່ຮູ້ຈັກຂ້າພະເຈົ້າດີ, ແຕ່ບໍ່ກ້າເວົ້າຫຍັງພໍຄວາມ: ເພາະເຂົາເຈົ້າຫ້າມບໍ່ໃຫ້ໃຜໂອ້ລົມກັບຂ້າພະເຈົ້າ. ແຕ່ຂ້າພະເຈົ້າຊ້ຳເປັນຜູ້ທຳອິດທີ່ທຳລາຍຄວາມມິດງຽບນັ້ນ.

- ທ່ານ ກິດວິນ, ທ່ານ ກະລຸນນາຟັງຂ້າພະເຈົ້າເວົ້າກ່ອນ, - ຂ້າພະເຈົ້າຫັນມາຫາທ່ານນັກກົດໝາຍ ເຊິ່ງຂະນະນັ້ນພວມຍືນກັບທ່ານຜູ້ອຳນວຍການເບິ່ງຂ້າພະເຈົ້າແຕ່ງກາຍຢູ່, - ຈົ່ງອະນຸຍາດໃຫ້ຂ້າພະເຈົ້າພົບກັບທ່ານ ຄົບຄາກ. ເພາະເພິ່ນຈະເປັນຜູ້ກົດປຸ່ມຕັດສິນ. ຂ້າພະເຈົ້າຢາກຮູ້ທີ່ສຸດວ່າເພິ່ນຈະປ່ອຍລໍຊໍອອກໄປແບບໃດ.

ທັນໃດນັ້ນ ຄວາມຫວາດສຽວອັນສະຍົດສະຫຍອງກໍກຸ້ມກ້ອນຂຶ້ນໃນຫົວໃຈຂອງຂ້າພະເຈົ້າ. ກ້າບັນຫານີ້ໄດ້ຮັບການວາງແຜນໄວ້ກ່ອນແລ້ວເດລະ? ກ້າອີ່ຕາ ຄົບຄາກ ໃດໜຶ່ງຫາກປ່ອຍລໍຊໍອອກໄປແຮງໂພດເດລະ? ກ້າລາວບໍ່ຮູ້ຈັກບັນຊາເຄື່ອງຈັກເດລະ? ກ້າເຂົາເຈົ້າທັງໝົດເຫລົ່ານັ້ນລ້ວນແຕ່ຢາກຈະໃຫ້ຂ້າພະເຈົ້າ ...

ຂ້າພະເຈົ້າລືມຄາວໄປວ່າຕົນເປັນໃຜ, ແລ້ວເລີຍຍືນພຶດຂຶ້ນແລະແຜດສຽງ:

- ຂ້ອຍບໍ່ຕ້ອງການ! ຂ້ອຍບໍ່ສະແດງດອກ!

ສຽງເຍາະເຍີ້ຍໜຶ່ງດັງກ້ອງຂຶ້ນ:

- ບະ, ບະບະ! ລູກລາວລົງຕົ່ງຫັ້ນ!

ຂ້າພະເຈົ້າປິ່ນລ້ວງຄົວຢູ່ໃນວົງແຂນອັນເຂັ້ມແຂງຂອງ ກິດວິນ ແລະຮ້ອງແຜດຂຶ້ນ:

- ໄດ້, ຫາລະລູກຂ້ອຍລົງຕັ່ງໂລດ!

ກິດວິນຊິມໃສ່ຫູຂ້າພະເຈົ້າ:

- ທ່ານ ຄົບຄາກຢາກລົມເຈົ້າໃດຫັ້ນ.

ຂ້າພະເຈົ້າແປກໃຈເປັນຢ່າງຍິ່ງ ເມື່ອແນມເຫັນເສດຖີຜູ້ນີ້. ລາວຍ່າງເຂົ້າມາດ້ວຍທ່າທາງທະນົງອົງອາດແລະເປັນເຈົ້າຕົນເອງ. ມັນຕັ້ງແມ່ນ ກລິບ ນັ້ນເອງ. ລາວນຸ່ງກືຢ່າງຫາບ່ອນຕິບໍ່ໄດ້ເລີຍ. ລູກເພັດເຫລື້ອມຍິບຍັບຢູ່ເທິງເຫລັກໜີບກາລະວັດຂອງລາວ. ກລິບແນມເບິ່ງຂ້າພະເຈົ້າຢ່າງເຄັ່ງຂຶມ, ແລະທັນໃດນັ້ນ, ດ້ວຍທ່າທີສະເພາະຂອງລາວເອງ, ລາວເລີກຄິ້ວເບື້ອງຊ້າຍຂຶ້ນ. ນັ້ນຄືສັນຍາລັກບອກໃຫ້ມິດງຽບແລະລະມັດລະວັງ. ຂ້າພະເຈົ້າເຂົ້າໃຈ

ວ່າຂະນະນີ້ບໍ່ແມ່ນຍາມຈະມາສະແດງຄວາມແປກໃຈຂອງຕົນຕໍ່ການພົບປະ ອັນຄາດບໍ່ເຖິງນີ້ແລ້ວ. ໂອ, ມັນຕັ້ງແມ່ນເສດຖີແທ້ໆນີ, ແຕ່ຂ້າພະເຈົ້າກໍເຫັນໄດ້ຈະແຈ້ງແລ້ວວ່າ ກລີບພອມໃສ່ຫນ້າກາກເພື່ອສວມບົດບາດນີ້. ລາວເວົ້າຜ່ານຫວ່າງແຂ້ວເຊິ່ງບໍ່ຄ່ອຍຈະສຸພາບພໍເທົ່າໃດ:

- ກິດວິນ, ບັກນ້ອຍມັນກ່າຍເຄື່ອງແລ້ວໆຫວະ? ຍອດເຫລົ້າໂຣມຫ້າຍອດໃສ່ນ້ຳຕານກ້ອນໃຫ້ມັນກິນ. ຢູ່ພາຍໃຕ້ກຳມືຂອງເຮົາ ມັນຈະໂດດໄດ້ຄືເທວະດາອົງຫນຶ່ງ.

ລາວຈັບມືຂ້າພະເຈົ້າ ແລະ ເວົ້າໃຫ້ກຳລັງໃຈວ່າ:

- ນ້ອຍ, ໂດຈົ່ງປີ້ນແຕ່ສອງຮອບເທົ່ານັ້ນເດີ. ແລະນັບຢູ່ໃນໃຈຮອດສິບເອັດ, ພໍຮອດສິບສອງໂດກໍຈະລົງໄປນັ່ງຢູ່ໃນກະກັງແລ້ວ. ເອົາລະ, ອອກສູ່ເວທີໄດ້ແລ້ວ. ອີ່ດາເກົ້າຜູ້ພິພາກສານັ້ນຈະດຽມຄັນຮົ່ມກໍຊ່າງມັນ. ພວກເຮົາຈະເຮັດໃຫ້ພະຍຸໃຫຍ່ລົມແດງເກີດຂຶ້ນຢູ່ເທິງເວທີສະແດງ...

ຂ້າພະເຈົ້າດູດກືນກິນກ້ອນນ້ຳຕານນັ້ນຫມົດແລ້ວຍືນຂຶ້ນ.

- ພ້ອມແລ້ວ.

ກລີບເວົ້າ:

- ແບບນັ້ນດີ, ຈົ່ງແນມເບິ່ງຊີວິດດ້ວຍຄວາມມ່ວນຊື່ນກ່ວາເກົ່າ, ແລະໂດຈະສາມາດທຳລາຍສະຖິຕິຂອງທ້າວບີນຄົນກ່ອນໄດ້ໃດ, ນ້ອຍເອີຍ...

ສຽງດົນຕີດັງກ້ອງມາຈາກເວທີ, ຄະນະອຳນວຍການບໍ່ໄດ້ຫວາດຫວັ່ນຕໍ່ລາຍຈ່າຍໃດໆທັງສິ້ນແລະກໍໃຫ້ໂອກາດແກ່ມວນຊົນໄດ້ຊົມດົນຕີໃນຂະນະທີ່ສານພັກຜ່ອນຊົ່ວຄາວຢູ່ນັ້ນ.

ກລີບ ອອກຄຳສັ່ງ:

- ໄປ, ນ້ອຍ! ເອົາລະ, ຍ່າງເປັນຈັງຫວະ!

ບົດເພງ "ຈັງຫວະເດີນຂອງນັກຟັນດາບ" ດັງກ້ອງຂຶ້ນ. ເມື່ອຂ້າພະເຈົ້າກ້າວອອກສູ່ເວທີນັ້ນ, ໂຄມໄຟທັງມວນລ້ວນແຕ່ເຍືອງສຸມມາໃສ່ຂ້າພະເຈົ້າທັງນັ້ນ. ຂ້າພະເຈົ້າຍ່າງໄປໃນລະຫວ່າງກາງຂອງທະຫານສາລະວັດທີ່ຢືນລຽນເປັນສອງແຖວຊື່ຈັດຢູ່ສອງຟາກຂ້າງແລະລະຫວ່າງກາງຂອງພະນັກງານຮັບໃຊ້ຢູ່ເທິງເວທີສະແດງນັ້ນ. ຢູ່ເຊິ່ງຫນ້າຂອງຂ້າພະເຈົ້ານັ້ນ ແມ່ນຈັກຖ່າຍຮູບເງົາສອງເຄື່ອງແລະໄມໂຄໂຟນທີ່ຕິດຢູ່ເທິງລໍ້ເລື່ອນ. ຂ້າພະເຈົ້າຢາກທຸບເຄື່ອງຈັກທີ່

ມາປະກົດຕົວຢ່າງໄຮ້ມາລະຍາດຢູ່ນີ້ນັ້ນໃຫ້ແຫລກມຸ່ນໄປ ແລະຢາກຈະຕີຄົນພວກທີ່ວງນວັດປັດກັກຂືນຢູ່ກັບລໍ້ເລື່ອນດັ່ງກ່າວ ຂ້າພະເຈົ້າກໍາກໍາປັ້ນທັງສອງເບື້ອງເຂົ້າ, ຍືດຕົວຂຶ້ນ... ທັນໃດນັ້ນກໍໄດ້ຍິນສຽງຂອງ ກລິບ ເວົ້າຢູ່ທາງຫລັງວ່າ:

- ລູກຊາຍທີ່ຮັກຂອງພໍ່ເອີຍ, ຈົ່ງກ້າຫານຂຶ້ນ! ໂລກທັງໂລກພວກຝາກຄວາມຫວັງໄວ້ກັບລູກ!

ເຂົາກ່າວສໍານວນເຫລົ່ານັ້ນໄດ້ຢ່າງຄ່ອງແຄ້ວດ້ວຍນໍ້າສຽງອັນສູງສົ່ງຂອງພໍ່ຜູ້ທີ່ຮັກລູກ ຂອງຕົນຢ່າງສຸດໃຈຫົວໃຈ.

ຂະນະນັ້ນ, ໃນໂຮງສະແດງປະກົດວ່າຊຸນລະມຸນວຸ້ນວາຍກັນຂຶ້ນ. ຍິງຄົນຫນຶ່ງນຸ່ງກືອາດເອ້ທັງຊຸກພວກທະຫານສາລະວັດແລະພະນັກງານຮັບໃຊ້ຢູ່ເທິງເວທີທັງຮ້ອງໄຫ້ແລ່ນລູ່ເຂົ້າມາຫາຂ້າພະເຈົ້າ. ນາງຄູ້ເຂົ່າລົງດິນ, ຊູສອງມືມາທາງຂ້າພະເຈົ້າແລ້ວຮ້ອງຂຶ້ນ:

- ຊາກລີ ທີ່ແສນຮັກ! ຢ່າໄດ້ປ່ອຍປະລະໄລເທາະ!

ຂ້າພະເຈົ້າຖອຍຄືນກ້າວຫນຶ່ງຍ້ອນຄວາມສະທ້ານໃຈ ແລະເວົ້າອອກມາດ້ວຍຄວາມກະວົນກະວາຍ.

- ຂໍນາງຈົ່ງອະໄພ...

ຂ້າພະເຈົ້າກ້າວຕໍ່ໄປ, ຍ່າງຜ່ານຫນ້າຜູ້ຍິງທີ່ພວມຍ່ອງຍີ, ກົກຫົ້ນຜົມຂອງຕົນ ຍ້ອນຄວາມເຈັບຊໍ້າປ່ວງບ້ານັ້ນ.

ກລິບ ພ້າວຊິມໃສ່ຫູຂອງຂ້າພະເຈົ້າດ້ວຍສໍານຽງທີ່ລາວເຄີຍໃຊ້ເພື່ອລະດົມໃຈແລະກະຕຸກເສັ້ນວ່າ:

- ຢ່າສົນໃຈນໍາເລື່ອງຂີ້ຜອຍເຫລົ່ານັ້ນ, ໃນໂລກນີ້ ພວກຜູ້ຍິງໃຈອ່ອນເຫລົ່ານັ້ນມີກຸ່ມໄປ! ຈະຕ້ອງເຮັດໃຫ້ເຂົາເຈົ້າເຫັນວ່າສິນລະປະຂອງໂຕມັນຈັ່ງໃດ...

ເປັນອັນວ່າ, ຂ້າພະເຈົ້າໄດ້ກັບມາຢືນຢູ່ເທິງເວທີອີກຄັ້ງຫນຶ່ງ. ພຸ້ນຄືອູ່ສົ່ງ. ອ້ອມຂ້າງຂອງຂ້າພະເຈົ້າແມ່ນມວນຊົນຈໍານວນຫລວງຫລາຍທີ່ມີທຸກຮູບທຸກແບບພວມໂຮ່ຮ້ອງກ້ອງກັງວານຢູ່, ເຂົາເຈົ້າຄອຍກ້າເບິ່ງຮູບພາບທີ່ນອງເລືອດຢູ່ຢ່າງຫິວໂຫຍໃຫ້ສົມກັບກ້ອນເງິນຂອງ

ເຂົາເຈົ້າທີ່ເສຍໄປ. ທ່ານຜູ້ພິພາກສາງຸມຫົວດ້ວຍຄັນຫົ່ມອັນຫນຶ່ງແລະຄອນໆກໍແນມເບິ່ງກະຖັງນ້ຳນັ້ນດ້ວຍຄວາມຫວາດກົວ.

ຂ້າພະເຈົ້າ ຄຶດຊັ່ງຊາຢູ່ຢ່າງເບີກບານວ່າ: "ບໍ່, ກູບໍ່ຕ້ອງການ, ແລະຈະບໍ່ຍອມຕາຍເພື່ອເປັນເຫຍື່ອລະບາຍອາລົມໃຫ້ພວກສູ. ກູບໍ່ຢາກຕາຍແບບພວກຂ້າທາດເທິງເວທີ" ໂກລີເຢີຍ" ໃນປາງບູຮານນັ້ນ.

ທ່ານຜູ້ພິພາກສາ ເອີ້ນມາໃສ່ຂ້າພະເຈົ້າວ່າ:

- ຈຳເລີຍ, ຜູ້ລະບຸຊື່ວ່າເປັນ ບິນ, ຂ້ອຍສະເຫນີໃຫ້ເຈົ້າຈົ່ງພິສູດໃຫ້ສານເຫັນຫລັກການຕົວຈິງ...

ກລີບໄດ້ມາຢືນຢູ່ຂ້າງຂ້າພະເຈົ້າ ແລະກົ້ມຫົວຄຳນັບທັງສີ່ທິດ.

ວົງດົນຕີເລີ່ມບັນເລງເພງ "ນອນສາເຍີແມວນ້ອຍຂອງແມ່..."

ຂ້າພະເຈົ້າເຂົ້າໄປນອນຢູ່ໃນອູ່.

"ພຸດໂທເອີຍ, ນ້ອງຢູ່ໃສເນາະ, ເອດີ?" - ນັ້ນຄືຄວາມຄຶດສຸດທ້າຍຂອງຂ້າພະເຈົ້າ.

- ລະວັງ!

- ພ້ອມແລ້ວ!

- ບິນ!

"ວູງງງງງງງວູດ-..." ສຽງຕີກອງແລະສຽງຮ້ອງໂຮຂອງຝູງຊົນປະສານກັນເຂົ້າເປັນສຽງດຽວ. ໂຮງສະແດງກາຍຍະສິນປະກົດວ່າຕີກວູບລົງໄປແລະພວມປິ່ນປີ້ນພັງຍ່າວລົງໃສ່ເທິງຫົວຂອງຂ້າພະເຈົ້າ. ຊົ່ວພິບຕາດຽວເທົ່ານັ້ນ ຂ້າພະເຈົ້າກໍເຂົ້າໄປນັ່ງຢູ່ໃນກະຖັງນ້ຳເປັນທີ່ຮຽບຮ້ອຍແລ້ວ, ຂ້າພະເຈົ້າໂງຫົວຂຶ້ນແລະຂາກງງກົ້ມຕະພຶດຢູ່ຄືດັ່ງຫມາຫຍູຍສະຫມັກນ້ຳ.

ກລີບ ເດ່ມືມາໃຫ້ຂ້າພະເຈົ້າ. ມວນຊົນຮ້ອງໂຮແຜດແຜ້ຂຶ້ນຈົນຫູດັບຕັບໄຫມ້. ທ່ານຜູ້ພິພາກສາສັ່ນກະດິງ, ແຕ່ເຮັດຈັ່ງໃດຊິໄປໄດ້ຍິນ.

ໂຮງສະແດງ "ໂກໂລເຊອູມ" ເຄີຍເປັນເຊັ່ນນັ້ນຢູ່ດອກ. ບັດນີ້ ຂ້າພະເຈົ້າບໍ່ແມ່ນນັກໂຈນກາກເນໂຣ ອີກແລ້ວ, ແຕ່ໄດ້ກັບກາຍມາເປັນ ເຊມຸຍແອນບິນ ຄືເກົ່າ.

ກົດວິນ ອອກຄວາມເຫັນ. ລາວເວົ້າວ່າ ຂ້າພະເຈົ້າຍັງຢືນເອົາຕົນເອງໄດ້ຢ່າງວິເສດ.

ລາວຍັງເວົ້າວ່າ ຂ້າພະເຈົ້າມາເຖິງ ມາຊາດລານ ໃນຕອນທ່ຽງດັ່ງທີ່ຊາວປະມົງຜູ້ທີ່ເອົາຂ້າພະເຈົ້າໂດຍສານມານຳໄດ້ຢັ້ງຢືນນັ້ນ. ແລະເວົ້າວ່າ ສາດສະດາຈານ ໂຣນເຊີ ຖືກຂ້າໃນເວລາເກົ້າໂມງເຊົ້າ. ບັນຫານີ້ຢືນຢັນໄດ້ຈາກໂມງປຸກສີທອງແດງຂອງສາດສະດາຈານນັ້ນເອງ, ເພາະມັນຕົກລົງໃສ່ພື້ນເຮືອນໃນຂະນະທີ່ ໂຣນເຊີ ພວມຕໍ່ສູ້ກັນກັບຄາດຕະກອນແລະໂມງນັ້ນຢຸດເດີນເວລາເກົ້າໂມງ. ທ່ານໄອຍະການປະກາດລົບລ້າງຄະດີ, ແລະກໍເປັນອັນວ່າຂ້າພະເຈົ້າໄດ້ເປັນອິດສະຫລະ.

ແຕ່ຊົ່ວຊີວິດຂອງຂ້າພະເຈົ້າກໍຄົງມີຄວາມຮູ້ສຶກແປກປະຫລາດຢ່າງຫນຶ່ງກ້າມເກາະ ຢູ່ກາງຫົວໃຈ. ແຕ່ນັ້ນມາ ຂ້າພະເຈົ້າມີຄວາມອາຄາດບາດຫມາງກັບເວທີສະແດງຂອງໂຮງກາຍຍະສິນເປັນຢ່າງຍິ່ງ, ເຖິງເຂົາຈະສະແດງລາຍການມ່ວນໆເຖິງພຽງໃດຂຶ້ນກໍຕາມ.

ຝູງຊົນນັບພັນໆຄົນໄດ້ແຫ່ໄປສົ່ງລົດໂອໂຕຄັນຫນຶ່ງເຊິ່ງມີຂ້າພະເຈົ້ານັ່ງຢູ່ໃນຫັ້ນ, ກົດວົນແລະກົບໄປສົ່ງຈົນຮອດຄຸກ.

ເປັນອັນວ່າ, ໃນທີ່ສຸດກໍເຫລືອພຽງຂ້າພະເຈົ້າຜູ້ດຽວ. ດະຢົກເຊີ ຍ່າງເຂົ້າມາໃນຫ້ອງຂັງ.

ລາວຈັບມືຂ້າພະເຈົ້າແຫນ້ນໆແລະເວົ້າດ້ວຍຄວາມອ່ອນຫວານ:

- ຂໍອວຍພອນແດ່ເຈົ້າ, ຂ້ອຍຈະມີກຽດພໍໃຫ້ເຈົ້າໄດ້ສັ່ງການຫຍັງແດ່ບໍ່? ມື້ອື່ນເຈົ້າຈະມີເງິນກ້ອນໃຫຍ່ຢູ່ໃນມື, ພາໃຫ້ເຈົ້າລື່ນກົບຕັ້ງສິບໆທົບພຸ້ນແຫລະ.

ຂ້າພະເຈົ້າຕອບລຸງນັ້ນໄປດ້ວຍອາການຄົ້ນຄຶດແຕ່ຫນັກແຫນ້ນ:

- ລຸງ ດະຢົກເຊີ ທີ່ ຮັກແພງ, ຖ້າລຸງຫາກເປັນເພື່ອນຂອງຂ້ອຍ ແລະແນ່ໃຈວ່າຈະເປັນເຊັ່ນນັ້ນແລ້ວ, ຂໍລຸງຈົ່ງຊັບຊ້ອນເຮັດແນວໃດໃຫ້ເຂົາເຈົ້າປ່ອຍຂ້ອຍອອກໄປໃນຄືນນີ້ໂລດ. ຂ້ອຍບໍ່ຢາກລໍຮອດມື້ອື່ນ.

- ສະເພາະຂ້ອຍແລ້ວ, ຄຳຮຽກຮ້ອງຂອງຄົນຄືເຈົ້ານັ້ນ ມັນປຽບດັ່ງດຳລັດອັນຫນຶ່ງ. ທຸກສິ່ງທຸກຢ່າງຢູ່ໃນໂລກນີ້ລ້ວນແຕ່ແມ່ນຝາມືຂອງມະນຸດເປັນຜູ້ຕັດສິນ. - ລຸງນັ້ນເວົ້າຢ່າງເປັນທາງການ ແລ້ວກໍຍ່າງອອກໄປ, ໂດຍໄຂປະຕູຫ້ອງຂັງກົ້ມໄວ້.

ຕົກທ່ຽງຄືນ, ເຂົາເຈົ້າໄດ້ໃຊ້ຄົນມາເອີ້ນຂ້າພະເຈົ້າໄປຫ້ອງການຂອງຄຸກ.



13-952

ເລຂາ ແບັນ ນັ່ງຢູ່ເທິງຕັ່ງສູງຂ້າງໂຕະສັ່ນຂາດິກໆ, ລາວຫາງ່ງຫນ້າຄືກັບຫຍໍ້ຕົວລົງມາເວົ້າກັບຂ້າພະເຈົ້າດ້ວຍເຈດຕະນາດີ.

- ບີນ, ດຽວນີ້ເຈົ້າສາມາດໄປທົ່ວສາລະທິດໄດ້ແລ້ວ. ອັນນີ້ກໍເວົ້າແດ່ເຮົາເດີ, ຄະດີນີ້ອ່າວຢາກມະຫັດສະຈັນແດ່. ຫນັງສືພິມຫນັງສື ຕ່າງໆຂອງເຈົ້າສູນເສຍໄປຫມົດ. ສິບຂອງໂຮນເຊີຜູ້ເຄາະຮ້າຍນັ້ນກໍຊອກບໍ່ເຫັນຊ້ຳ. ຜູ້ຮ່ວມມືກັບເຈົ້າກໍບໍ່ເຫັນຮ່ອງຮອຍເລີຍ. ນັ້ນແມ່ນຄວາມຜິດພາດອັນໃຫຍ່ຫລວງ. ແຕ່ສິ່ງເຫລົ່ານັ້ນ ກໍບໍ່ອາດຈະຫັນປ່ຽນຫມາກພົນສຸດທ້າຍຂອງມັນໄດ້. ເຈົ້າສາມາດໂດດໄດ້ປານພິຍັກໂຕຫນຶ່ງ ແລະຂະນະນີ້ ໂດຍອີງໃສ່ກົດຫມາຍ ເຈົ້າສາມາດອອກໄປຈາກຄຸກທີ່ຫນ້ານັບຖືຂອງພວກເຮົານີ້ໄດ້ແລ້ວ ແລະຢາກໄປໃສກໍຕາມໃຈ...

- ທ່ານ ແບັນ ຄັນຊັ້ນເຮົາກໍຂໍລາໄປຕະຫລອດຊາດກ່ອນລະ, - ຂ້າພະເຈົ້າເວົ້າພ້ອມທັງແກ້ເສື້ອນັກໂທດອອກ.

ທັງສັບຊ້ອນເຈັຍສໍຢູ່ເທິງໂຕະ, ແບັນທັງເວົ້າຢ່າງອັບອູ້ອັບອື້ງ:

- ຫລັງຈາກແລ້ວພິທີການ ພວກເຮົາຄ່ອຍລາຈາກກັນ. ຈັ່ງຊັ້ນກໍ ... ໃບຕັດສິນຂອງສານ...

- ແບັນຂະຍິບຕາຢ່າງຕໍແຫລ - ເວົ້າແທ້ແລ້ວເຈົ້າກໍລໍ້ທ່ານຜູ້ພິພາກສາໄດ້ດີຢູ່ໃດເນາະ ... ຈິງສາລະພາບສາ, ເຈົ້າຫັນໄດ້ເຊື່ອງເງິນໄວ້ຈຳນວນຫນຶ່ງແມ່ນບໍ່?

ຫາກຂ້າພະເຈົ້າຕອບໄປຢ່າງຂາດຄວາມລະມັດລະວັງນ້ອຍຫນຶ່ງເທົ່ານັ້ນ, ເສື້ອນັກໂທດລາຍແຊກນັ້ນກໍສາມາດທີ່ຈະຄຸມໃສ່ຕົວຂອງຂ້າພະເຈົ້າອີກຄັ້ງຫນຶ່ງ, ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງເຫັນໃຈໃຫຍ່ແລ້ວຕອບໄປວ່າ:

- ທົວຂວັນຜູ້ອື່ນທີ່ພວມມີທຸກ ມັນເປັນບາບ ໃດ. - ຂ້າພະເຈົ້າເວົ້າຫລໍາຄືນຄຳສອນ. ປະໂຫຍກຫນຶ່ງໃນພະຄຳພີ ເຊິ່ງຂ້າພະເຈົ້າໄດ້ຫຍິບຢູ່ໃນຄຸກແລະສົ່ງແສງຕາແນມລົງໄປດ້ວຍທ່າທາງລຳຄານໃຈ.

ຄຳຕອບນີ້ໄດ້ຊ່ວຍກອບກູ້ເອົາຂ້າພະເຈົ້າອອກຈາກຄວາມໂມໂຫ. ຄວາມຈິງແລ້ວ, ໃນ

ໃຈຂ້າພະເຈົ້າພໍຍາກຈະຊັດບັກຫນ້າຊື່ວນັ້ນຈັກບາດຈົນຄາງບິດໄປພຸ້ນແຫລະ, ເພາະວ່າຈົນກະທັ້ງນາທີສຸດທ້າຍແລ້ວມັນກໍຍາກຈະຈູງຂ້າພະເຈົ້າເຂົ້າຫາແຮ້ວຢູ່.

ດະຍົກເຊີ ຍ່າງເຂົ້າມາໃນຫ້ອງດ້ວຍຄວາມຫນັກຫນ່ວງ.

- ນີ້ເປັນຄຳສັ່ງຂອງຂັ້ນເທິງ, ແບັນ, ສົ່ງເງິນຄືນໃຫ້ທ່ານປິນສາ.

ປະກົດວ່າ ແບັນ ສະເດີດຂຶ້ນ:

- ເອີ, ແມ່ນຕີ! ເງິນຄ່າຫຍິບປົ້ມຂອງເຈົ້າມີຢູ່ ສິບເກົ້າດອນລ່າ ແລະສິບເຊັນ. ທ່ານປິນ, ຂໍທ່ານຈົ່ງເຊັນຮັບເອົາ...

ແບັນ ມອບເງິນໃຫ້ຂ້າພະເຈົ້າ, ຫມໍເຍີ້ຍ:

- ທ່ານຈົ່ງກັບຄືນສູ່ຫມູ່ເກາະຂອງທ່ານແລ້ວຕົ້ມປາທູກິນສາ, ຂໍທ່ານຈົ່ງເປັນສຸກ. ທ່ານເຮັດໃຫ້ພວກຂ້າພະເຈົ້າຫຍຸ້ງຍາກນຳສ່ຳນີ້ກໍພໍແລ້ວ. ເອີລືມ, ເຈົ້າແກ້ຫນວດຢູ່ໃນຄຸກສາມເທື່ອ, ຈະຕ້ອງກອນເງິນຈາກເຈົ້າຄືນມາສາມສິບເຊັນ...

ຂ້າພະເຈົ້າວາງຫມື່ງດອນລ່າໄວ້ເທິງຫນ້າໂຕະ. ແບັນຟ້າວຍັດມັນລົງໃນລີ້ນຊັກເອົາໃບຕັດສິນໂທດປິດບັງມັນໄວ້.

ເມື່ອຕອນຂ້າພະເຈົ້າພວມສຸບຫມວກແງບໃສ່ຫົວຫັ້ນ, ເຂົາກໍເວົ້າສງດສີຂຶ້ນວ່າ:

- ຫວັງວ່າຈະໄດ້ພົບເຈົ້າຢູ່ນີ້ອີກໃນບໍ່ຊ້າ.

ຂ້າພະເຈົ້າກໍຕອບມັນໄປຢ່າງບໍ່ເສຍແຕ້ມເຊັ່ນກັນ:

- ຂ້ອຍຂໍຝາກຄວາມຍັ່ງມຍາມກາມຂ່າວຢ່າງຈິງໃຈເຖິງທ່ານ ກະແຣັກ ແລະຊ່ວຍເວົ້າໃຫ້ແດ່ວ່າຂ້ອຍເຄົາລົບຍຳເກງວິທີສອບສວນຂອງເພິ່ນເປັນຢ່າງຍິ່ງ.

ເມື່ອຂ້າພະເຈົ້າຍ່າງອອກຫາວິດປະຕູ, ດະຍົກເຊີ ເວົ້າອອກມາດ້ວຍຄວາມຈິງໃຈວ່າ:

- ເຈົ້າຢ່າໄປເກັບເອົາຄວາມເວົ້າຂອງທ້າວ ແບັນ ມາໃຫ້ມັນຫຍຸ້ງໃຈ. ໂຊກຊາຕາໄດ້ເຮັດໃຫ້ມັນກາຍເປັນຄົນມັກສັບມັກຕອດຫມູ່ຈະເຮັດຈັ່ງໃດໄດ້. ເຈົ້າຄວນໄປຫາໂຮງແຮມຫລັງໃດຫລັງຫນຶ່ງເພື່ອຄ້າງຄືນ, ມື້ອື່ນເຊົ້າຈົ່ງໄປຫາທ່ານຜູ້ອຳນວຍການໂຮງກາຍຍະສິນ. ເຊື່ອວ່າຢູ່ຫັ້ນຍາມໃດກໍມີວຽກໃຫ້ເຈົ້າເຮັດຢູ່ດອກ...

ແຕ່ຂ້າພະເຈົ້າຊ້ຳໄປຊອກຫາສະຖານີລົດໄຟ, ຕີນທັງສອງກ້ຳຍ່າງຍ່າງເມົາມົວໄປຕາມ

ຂອບທາງທີ່ປຽກແລະມື້ນຍ້ອນຜົນໃນຍາມກາງຄືນ. ຂ້າພະເຈົ້າຢາກຊອກຫາເສັ້ນທາງເດີນໃຫ້ແກ່ຊີວິດຕົນເອງພຸ້ນຫລາຍກ່ວາ.

ເປັນອັນວ່າ ຫລັງຈາກການພະເນຈອນໄປທົ່ວສາລະທິດແລ້ວ, ໃນທີ່ສຸດຂ້າພະເຈົ້າກໍໄປເຖິງຝັ່ງທະເລທາງທິດບິວລະພາ. ຂ້າພະເຈົ້າເລີ່ມຮູ້ສຶກໄດ້ວ່າມີສາຍລົມເຢັນຂອງມະຫາສະໝຸດທີ່ແສນຄຸ້ນເຄີຍນັ້ນແລ້ວ. ຂ້າພະເຈົ້າຊື່ນອົກຊື່ນໃຈທີ່ສຸດ ເມື່ອແນມເຫັນກຳປັ່ນ "ແມວຂາວ" ທີ່ພວມບັນທຸກເຄື່ອງຫນັກຕຶງແລະພວມຈອດຢູ່ໃນທ່າກຳປັ່ນ.

ລຸງຊາເຂັວຂາວຍືນຢູ່ເທິງປະຕູບ່ອນຫົວອອກມາ ແລະຈື່ຂ້າພະເຈົ້າໄດ້ກັບຫນ້ອງໂລດ.

ກັບຕັນເຮືອ, ຂະນະພວມຍືນສູບຢາຢູ່ເທິງດາດຟ້າກຳປັ່ນ, ເຮັດຕາຫຶບເຂົ້າ, ພໍແຕ່ແນມເຫັນຂ້າພະເຈົ້າລາວກໍຮ້ອງມາໃສ່ດ້ວຍຄວາມປີຕິຊົມຊື່ນໂລດວ່າ:

- ຈັ່ງໃດ, ຈັ່ງໃດ, ບັກບໍ່ເປັນຕາສາເຫດເອີຍ! ກູແນມເຫັນຕົບໃດໄສ້ພຸງຂອງມຶງແລ້ວນ້ອຍເອີຍ. ມານີ້ດຸ! ກູຢາກກັບບ້ານ, ກະຈັ່ງຈັບເອົາຊວ້ານຫັ້ນ...

ກັບຕັນເຮືອຕວງກຶກແລ້ວ - ຂ້າພະເຈົ້າຢາກກັບຄືນບ້ານເດີມ.

## ຕອນທີແປດ

### I

ເກືອບສາມປີແລ້ວ, ນັບແຕ່ມື້ທີ່ພັດພາກຈາກຕົວເມືອງ ແອຊູໂອເອີ ບິດຸພູມ ທີ່ແສນຮັກນັ້ນໄປ, ແຕ່ຂ້າພະເຈົ້າກໍຍັງຫາທີ່ຕັ້ງບ່ອນຍືນຢູ່ໃຕ້ແສງສະຫວ່າງແຫ່ງດວງອາທິດນີ້ບໍ່ໄດ້ຈັກເທື່ອ. ຫລັງຈາກທ່ອງເລາະລ່ອງຮອບໂລກແລ້ວ, ຂ້າພະເຈົ້າກໍໄດ້ຫວນກັບຄືນມາຍັງແຄມຝັ່ງທະເລທີ່ມີເມກຫມອກປົກຄຸມຫຸ້ມຈອດແຫ່ງນີ້ອີກ. ແຜ່ນດິນແມ່ອ້າແຂນຮັບເອົາຂ້າພະເຈົ້າດ້ວຍຄວາມບໍ່ຍິ້ມແຈ່ມໃສພໍເທົ່າໃດ. ຂ້າພະເຈົ້າບໍ່ຢາກຈະລ້ຽງເອີຍຊີວິດດ້ວຍການຍຶດອາຊີບກຳມະກອນບ້ອນກ່ານເປັນທີ່ຕັ້ງ. ໃນໃຈຂອງຂ້າພະເຈົ້າຍັງບໍ່ທັນສິ້ນຫວັງເທື່ອ. ແຕ່ຂ້າພະເຈົ້າບໍ່ສາມາດຊອກຢູ່ໃນຕົວເມືອງໃຫຍ່, ບ່ອນເຊິ່ງຂ້າພະເຈົ້າຂຶ້ນສູ່ຝັ່ງແຫ່ງນີ້ໄດ້ເລີຍ.

ລະດູໃບໄມ້ຫລົ່ນຍ່ອງໃກ້ເຂົ້າມາແລ້ວ, ຄືນຫນຶ່ງຢູ່ທີ່ສວນສາທາລະນະ, ຂ້າພະເຈົ້າຈຳຕ້ອງໄດ້ນັ່ງເອົາຫລັງອີງຫລັງກັບຊາຍພະເນຈອນຄົນຫນຶ່ງເພື່ອພໍໄດ້ອຸ່ນຄີງ.

ຄົນພະເນຈອນຜູ້ນັ້ນໄຊ້ປັດຊະຍາ:

- ຊີວິດຂອງຄົນພະເນຈອນ ມັນອັບປີ່ຍິ່ງກ່ວາຄວາມຕາຍເສຍອີກ. ໃນໂລກນີ້ກູບໍ່ມີຄົນຮັກຄົນແພງພໍ່ຄົນເລີຍ. ດ້ວຍເຫດນັ້ນ ສຳລັບກູແລ້ວ ຈະໄປໃສກໍ່ບໍ່ມີຄວາມຫມາຍຫຍັງ. ນີ້ນ້ອຍ, ໃນຊີວິດຂອງຕົນ ກູມີຄວາມຜິດມາບໍ່ຈັກວ່າເທົ່າໃດແລ້ວ! ແລະປະຈຸບັນນີ້ຈະກັບຕົວກັບໃຈມັນກໍຫລ້າສວາຍສາແລ້ວ!

ຂ້າພະເຈົ້າຖາມ:

- ມີຫຍັງຂັດຂວາງບໍ່ໃຫ້ເຈົ້າກັບເນື້ອກັບຕົວເປັນຄົນຮູ້ຜູ້ດີນຳເພິ່ນລະ? ຫລືບາງທີນິໄສຂອງເຈົ້າຫາກບໍ່ມັກຄົບຄ້າສະມາຄົມກັບຄົນທົ່ວໄປຕິເບາະ?

ລາວຕອບວ່າ:

- ກ່ອນອື່ນແມ່ນຄວາມທຸກຍາກລຳບາກແລະຫວ່າງງານນັ້ນລະ. - ດ້ວຍເຫດນັ້ນ ກູຈະນັ່ງຢູ່ຈັ່ງຊີ້ແລະລໍໄປຈົນກ່ວາຈະຂ້ອນຄືນ. ຫ່າງຈາກນີ້ບໍ່ໄກ, ຢູ່ຫລັງທາງອຸໂມງນີ້ມີຕູ້ລົດໄຟເປົ່າຂະບວນຫນຶ່ງ. ອີກບຶດຫນຶ່ງເພື່ອນຂອງກູສອງຄົນຈະມາໃຫ້ຂ່າວວ່າ, ຄວນຈະຫລອຍຂຶ້ນລົດໄຟເປົ່າຕູ້ນັ້ນເວລາໃດ ແລະຢູ່ໄລຍະໃດມັນຈຶ່ງຈະສະດວກ. ຫລັງຈາກອີກມື້ຫນຶ່ງກັບຄືນຫນຶ່ງ, ລົດໄຟກໍຈະນຳເອົາພວກເຮົາໄປເຖິງ ເວສະລີ.

ມາດຸພູມທີ່ແສນຮັກພວມກວັກມືຮຽກເອີ້ນເອົາຂ້າພະເຈົ້າຢູ່. ແລ້ວຂ້າພະເຈົ້າກໍ່ຕົກລົງໃຈ. ພວກໂດຍສານເຖື່ອນນັ້ນຫລອກລວງພວກໂຕ "ງົວເຖິກ" - ພວກເວນຍາມຕູ້ລົດໄຟ ແລະບັນດາຕູ້ຮ້ານທີ່ໃຊ້ບັນທຸກກ່ານນັ້ນໄດ້ເປັນຢ່າງດີ. ພວກເຮົາທັງສີ່ ເລືອໄປຕາມຂີ້ດິນ ແລະຈາກນັ້ນກໍຫລອຍຂຶ້ນໄປເທິງຕູ້ເປົ່າຕ່າງໆໄດ້. ຕໍ່ມາຂ້າພະເຈົ້າກໍນອນຂົດຄືຫມາບໍ່ມີເຈົ້າໂຕຫນຶ່ງຢູ່ເທິງຕູ້ຮ້ານທີ່ເຫມັນສາບອຶງ. ກິ່ນຂີ້ດິນພຸ່ງເຂົ້າດັງຈົນອຶດອັດ. ຄວາມຫິວນ້ຳຄືຈະໃຫມ້ນັ້ນທໍລະມານຂ້າພະເຈົ້າ. ໃບຫນ້າທັງສີ່ຄົນພວກຂ້າພະເຈົ້າທີ່ຂາດສ້ອຍດ້ອຍວາດສະຫນານັ້ນໄດ້ນອນຂ້ອນກັນຢູ່ບ່ອນຫນຶ່ງບ່ອນດຽວກັນເທິງຮ້ານລົດໄຟ, ແລະພວກເຮົາທຸກຄົນຕ່າງກໍກອດກັນແຫນ້ນເປັນກ້ອນອຸ້ມລຸ້ມ. ທັນໃດນັ້ນ ລົດໄຟກໍໄດ້ທົ່ງກະແທກຂຶ້ນຄືດັ່ງມັນໂມໂຫ. ຫົວຂອງຂ້າພະເຈົ້າຟາດໃສ່ຫົວຕະປູກງວດອກຫນຶ່ງ. ຂ້າພະເຈົ້າຫິວນ້ຳຈົນທົນບໍ່ໄຫວ ຈຶ່ງຫງາຍຫນ້າຂຶ້ນຟ້າແລ້ວອ້າປາກຕ້ອນເອົາຢາດນ້ຳຝົນທີ່ຕົກລົງມາຢ່າງກະຈັດກະຈາຍນັ້ນ.

ໃຜຜູ້ຫນຶ່ງນອນຢູ່ຕິດຫ້ອງຂອງຂ້າພະເຈົ້າຈົ່ມອຸ່ມໆຂຶ້ນມາດ້ວຍຄວາມໂມໂຫ:

- ມຶງຄືມາຕຶງເລື້ອຍແທ້!

ສ່ວນຜູ້ທີ່ນອນຢູ່ຂ້າງຂ້າພະເຈົ້ານັ້ນໄຄກ່ວາ, ແຕ່ມັນເອົາຕີນກີບສ້ວງຂອງຂ້າພະເຈົ້າບາດຫນຶ່ງເຈັບໆແລ້ວນອນກົນສອດໆຕໍ່ໄປ.

ລົດໄຟພຸ່ງຕົວໄປທາງຫນ້າ, ໃນຄວາມມືດ, ແລະໂດດດ່ງວບ່ງວພອຍນັ້ນ, ມັນຄ່ອຍເພີ່ມຄວາມໄວຂຶ້ນຢ່າງລະມັດລະວັງ.

ຂ້າພະເຈົ້າຕົກລົງໄປຢູ່ໃນຮ່ອງຂ້າງທາງລົດໄຟທັ້ນຫມົດມື້ຫນຶ່ງເຕັມໆ ເພື່ອລໍຖ້າໃຫ້ມັນຄໍ່າ ແລະລໍຖ້າຕູ້ລົດເບິ່ງຕູ້ໃດຕູ້ຫນຶ່ງຈະມາເຖິງ. ໃນທີ່ສຸດ ຂ້າພະເຈົ້າກໍສາມາດປີນຂຶ້ນໄປຍັງຕູ້ຮ້ານອີກຕູ້ຫນຶ່ງ, ທີ່ຈະເດີນທາງໄປສູ່ເວສະລີ. ແຕ່ຂ້າພະເຈົ້າຕ້ອງຖືກໄລ່ລົງຈາກຕູ້ລົດໄປກ່ອນທີ່ລົດໄຟຈະເຖິງແຫ່ງດັ່ງກ່າວ. ຢູ່ເບື້ອງຫນ້າຂອງຂ້າພະເຈົ້າຍັງມີທາງໄລຍະຍາວຢູ່ຕອນຫນຶ່ງ. ປະຈຸບັນນີ້, ຂ້າພະເຈົ້າຈະຕ້ອງຍ່າງໄປສູ່ ເວສະລີ, ແລ້ວຈາກແຫ່ງດັ່ງກ່າວຂ້າພະເຈົ້າຈະໄປສູ່ ແອຊູໂອເຣີ, ຂ້າພະເຈົ້າຈະໄດ້ເຫັນຫນ້າພໍ່ ແລະ ເອດີ ອີກ.

ແຕ່ອານິຈາ, ແຕ່ລະບາດກ້າວເດີນມັນບໍ່ຕ່າງຫຍັງກັບແຕ່ລະບາດກ້າວແຫ່ງຄວາມຄິດອັນມືດມົນທີ່ເຂົ້າມາທໍລະມານໃຈ. ຂ້າພະເຈົ້າມີສິດກັບຄືນເມືອບໍ່? ເພາະວ່າໃນຈົດຫມາຍ ຂ້າພະເຈົ້າສົ່ງແຕ່ພະມ້າມາຫາ ເອດີ ແລະພໍ່ເປັນບາງຄັ້ງບາງຄາວນັ້ນໄດ້ວາດພາບເຖິງສະພາບແວດລ້ອມໃຫມ່ຂອງຕົນຢ່າງສວຍສົດງົດງາມເຫລືອເກີນ, ຂ້າພະເຈົ້າຂຽນວ່າ ຂ້າພະເຈົ້າມໍ່ຈະກາຍເປັນພະນັກງານຊ່ວຍວຽກຜູ້ຫນຶ່ງຢູ່ໃນຫ້ອງທົດລອງວິທະຍາສາດ, ຂ້າພະເຈົ້າໄດ້ຕື່ມເຕີມເສີມແຕ່ງແລະຄຸຍໂມ້ໂອ້ອວດໄປເພື່ອອົບອຸ່ນຈິດໃຈຂອງພໍ່ແລະນາງສາວຜູ້ຫນ້າສົງສານນັ້ນ. ແນ່ນອນວ່າເຂົາເຈົ້າເຊື່ອຕາມຈົດຫມາຍເຫລົ່ານັ້ນຂອງຂ້າພະເຈົ້າ. ຂ້າພະເຈົ້າສ້າງມະໂນພາບແລະຄວາມຫວັງອັນລົມໆແລ້ງໆແບບນັ້ນໃຫ້ແກ່ເຂົາເຈົ້າເຮັດຫຍັງ? ດງວນີ້ເດລະ? ຂ້າພະເຈົ້າກໍຄືງເປັນຄົນຂໍທານກິນແລະບໍ່ມີຫົວຕີນປາຍນອນຢູ່ຕາມເຄີຍ. ເຮົາໄປຟັງຄວາມອີ່ຕາກົບ ນັ້ນເຮັດຫຍັງ? ຄວນແທ້ ເຮົາຈະຕ້ອງສັກຫົວລົງໃສ່ຮ້ານປູ້ຊີ້ຊາຍຂອງເວທີສະແດງຫລືບໍ່ກໍສັກຫົວລົງໃສ່ໂຕະຂອງຜູ້ພິພາກສາໃຫ້ຫົວແຕກມຸ່ນໄປແລ້ວ ກໍຫມົດເລື່ອງແລ້ວເດ.

ຈິດໃຈສັງມາຫຍຸ້ງທໍລະມານຍ້ອນຄວາມຄິດກັງວົນຮ້ອຍແປດພັນຢ່າງເດນໍ, ຂ້າພະເຈົ້າ

ຫ້າມບາດຕີນໄວ້, ໃນທີ່ສຸດ ຂ້າພະເຈົ້າກໍຍນຈົ້ງຢູ່ກັບຫມ້ອງ, ເກັບເອົາຂີ້ຫີນແຮ່ຕາມຫີນທາງຍັດໃສ່ກົງເກົ່າສຳລັບໃສ່ເຄື່ອງເດີນທາງນັ້ນຈົນເຕັມ, ສິກຂຶ້ນບ່າແລ້ວຍ່າງຕໍ່ໄປດ້ວຍບາດກ້າວອັນອ່ອນເພຍ.

ຫັ້ນແດ ຮ່ອງນ້ຳເລິກງຂອງ ເວສະລີ.

## II

ຂ້າພະເຈົ້າຈື່ໄດ້ວ່າ ຕີນຢູ່ເທິງຝັ່ງຮ່ອງນ້ຳນັ້ນດົນທີ່ສຸດ, ຄວາມເຈັບຊ້ຳແລະຫມອງໄຫມ້ກົມກ້ອມໃນຫມາກຫົວໃຈ.

ບະ, ຖ້າເຮົາຢູ່ໃນເມືອງນັ້ນຕໍ່ໄປອາດຈະດີກວ່ານີ້ບໍ: ຂ້າພະເຈົ້າອາດຈະຄ້າງຄືນຢູ່ບ່ອນນັ້ນ ຖ້າບໍ່ແມ່ນຢູ່ໃຕ້ພຸ່ມໄມ້ໃນສວນສາທາລະນະ ວິກຕໍເຣຍ ແລ້ວກໍອາດຈະນອນຢູ່ໃນຂຸມກອກຂີ້ເຫຍື້ອຕ່າງໆທີ່ ກອນເດີລົນ.

ລາຕີການທີ່ມືດດຳຂອງຄືນຫນຶ່ງ ໃນທ້າຍລະດູໃບໄມ້ຫລົ່ນງຳອືບລົງມາຈາກທ້ອງຟ້າທີ່ເຕັມໄປດ້ວຍເມກອັນຫນາຕຶບ, ໃນຂະນະທີ່ຫົວລົມຫນາວເລີ່ມພັດມາຈາກທິດເຫນືອແລະໃນບັນຍາກາດຄື້ມມືດມົວຄືຈະມີຝົນຝອຍໂຮຍລົງມານັ້ນ, ພຽງແຕ່ຫວນຄືນເຖິງພາບດັ່ງກ່າວນີ້, ບໍ່ວ່າແຕ່ຈະເປັນຄົນຊັດເຊພະເນຈອນບໍ່ມີບ່ອນຈະປ່ອນຫົວຫລຸບຊຸບຫົວນອນໃດໆ ກໍຕ້ອງສັ່ນຂົນຄິງຕິງຫມາກຫນາວຂຶ້ນມາແລະ ພະຍາຍາມດຶງປົກເສື້ອທີ່ເຄີຍຜ່ານຫມອກຜ່ານລົມຂອງເຂົາເຂົ້າມາບັງຄິງໃຫ້ແຈບໆກວ່າເກົ່າ.

24/VII
ຫ້າມຈຳໜ່າຍ

ໃນມັນສະຫມອງຂອງຂ້າພະເຈົ້າມີພາບສຳນຶກຢ່າງຫນຶ່ງປະກົດຂຶ້ນມາຢ່າງເດັ່ນຊັດ: "ບໍ່, ເຮົາຈະບໍ່ກັບໄປອີກ. ຈົ່ງປ່ອຍໃຫ້ນ້ຳຮ່ອງນີ້ກຸ້ມຫນ້າເຮົາໄປພ້ອມກັບຄວາມຫມົ່ນຫມອງນີ້ສາ".

ແຕ່ຈະລົງມືດຳເນີນບາດກ້າວຕັດສິນນັ້ນໄດ້ ມັນບໍ່ແມ່ນເລື່ອງຈະງ່າຍເລີຍ. ຄຶດເຖິງຄ່ຳຄືນທີ່ມືດມິດອັນຍືດເຍື້ອເຢັນຢາງແລະປ່ຽວພອຍນັ້ນ, ຂ້າພະເຈົ້າສອຍມືຂຶ້ນມາຕິດດຸມເສື້ອທຸກຫນ່ວຍໄວ້ຢ່າງບໍ່ຮູ້ສຶກຕົວ. ເຖິງຢ່າງນັ້ນກໍຕາມ, ດຸມເສື້ອທັງຫມົດກໍຍັງເຫລືອພຽງສອງຫນ່ວຍເທົ່ານັ້ນ. ແລ້ວຂ້າພະເຈົ້າຄຶດເຖິງການກິນ, ແຕ່ຂ້າພະເຈົ້າບໍ່ສາມາດຈື່ຈຳໄດ້ວ່າຕົນໄດ້ກິນອາຫານຮ້ອນໆຄາບສຸດທ້າຍແຕ່ຕອນໃດ.

- ເພື່ອນໜຸ່ມເອີຍ, ຂໍເຈົ້າຈົ່ງອະໄພ, - ຂ້າພະເຈົ້າໄດ້ຍິນສຽງເວົ້າທີ່ແສນສຸພາບນັ້ນດັງຂຶ້ນຢູ່ໃກ້ໆ. ແລ້ວຂ້າພະເຈົ້າກໍງວາກໜ້າໄປຫາສຽງນັ້ນ.

ຢືນຢູ່ຂ້າງຂ້າພະເຈົ້າຟາກດົວຮົ້ວເຫລັກເບື້ອງໃນຂອງຮ່ອງນີ້ ແມ່ນຊາຍກາງຄົນຜູ້ໜຶ່ງ, ໜວດຄາງກະໄດຂອງລາວຮົກລຸງລັງ, ແຕ່ງກາຍບໍ່ຄ່ອຍຈະຮຽບຮ້ອຍພໍເທົ່າໃດ ແລະສວມໝວກໜ່ວຍໜຶ່ງເຊິ່ງມັນຢາກຫົດຫູ່ແດ່ແລ້ວ. ລາວກົ້ມນ້ຳລາຍເປັນເຊືອກົ້ນຄົດລົງໃສ່ທວນນ້ຳຂຸ່ນທີ່ພວມສະທ້ອນເງົາຂອງຕົ້ນໄມ້ຕີງທີ່ເກີດຢູ່ຝັ່ງຟາກເບື້ອງກົງກັນຂ້າມແລະພວມສະທ້ອນແສງໄຟທີ່ຮຸ່ງພໍມືບໆມົວໆຢູ່ນັ້ນ. ຕາທີ່ເລິກຂຳທັງຄູ່ຂອງຄົນຜູ້ນັ້ນມີແວວແຫ່ງຄວາມຍອກຍວນແບບໂສກເສົ້າພຸ່ງແວັບອອກມາ. ມືສອງເບື້ອງຂອງລາວກຳດິນຈີ່ກ້ອນໜັກໆທີ່ວາງຢູ່ເທິງຂອບລູກຕັ້ງຫີນອ່ອນນັ້ນໄວ້ແໜ້ນໆແລະແນມເບິ່ງຂ້າພະເຈົ້າທັງຍິ້ມຫົວ.

- ຂໍໂທດນຳເຈົ້າ, - ລາວຢ້ຳຄືນອີກ. - ຂໍເຈົ້າຈົ່ງກະລຸນາຊ່ອຍຂ້ອຍຈັກສອງຢ່າງແດ່.

ລາວເວົ້າຢ່າງສຸພາບ, ແລະຂ້າພະເຈົ້າກໍຄຶດຂຶ້ນມາໄດ້ວ່າ ຄວນຕອບລາວຢ່າງມີມາລະຍາດ.

- ຮຽນທ່ານ, ຂ້າພະເຈົ້າຕຽມພ້ອມຊິຊ່ວຍທ່ານ.

- ອະຮື່... - ລາວໄອ. - ເຈົ້າມີເງື່ອນເຊືອກອ່າວດີ ພໍຈະທົນຕໍ່ນ້ຳໜັກຂອງດິນຈີ່ກ້ອນນີ້ແດ່ບໍ່?

ໃນຫີບເດີນທາງທີ່ຂ້າພະເຈົ້າກໍຕິດຕົວມານຳແຕ່ຄາວອອກຈາກກຳປັ່ນ "ແມວຂຽວ", ກະເປົາໜ່ວຍທີ່ຍັງສາບກິ່ນຫ້ອງກຳປັ່ນແລະກິ່ນບ່ອນນອນຕ່າງໆເຊິ່ງສີຊີງອັນງົດງາມແຕ່ຄາວກ່ອນຂອງມັນບໍ່ເຫລືອຢູ່ຈັກດີ້ເລີຍນັ້ນຍັງມີສົ້ນເຊືອກນ້ອຍເກົ່າໆຈຳນວນໜຶ່ງຄ້າງຢູ່.

ຂ້າພະເຈົ້າຕອບ:

- ໜ້າເສຍດາຍວ່າຂ້າພະເຈົ້າບໍ່ມີເຊືອກດີໆເລີຍ. - ຍ້ອນຂ້າພະເຈົ້າຢາກຈະຊ່ວຍລາວເຕັມທີ່ດັ່ງນັ້ນຈຶ່ງເວົ້າຕື່ມ: - ແຕ່ຖ້າທ່ານພໍໃຈກັບສົ້ນເຊືອກບໍ່ນີ້, ນີ້ເດ, ມັນຍັງໜັ້ນຢູ່. ກ່ອນນີ້ ຂ້າພະເຈົ້າເຄີຍໃຊ້ມັນເຮັດແຮ້ວນົກເຂົາຢູ່ໃດລະ.

ເຖິງແມ່ນຂະນະນັ້ນ ຂ້າພະເຈົ້າບໍ່ຢາກໄຂກົງອອກມາຈັກໜ້ອຍຍ້ອນເຫດຜົນທີ່ເຂົ້າໃຈງ່າຍນັ້ນກໍຕາມ, ແຕ່ຂ້າພະເຈົ້າກໍພະຍາຍາມໂຍນກົງລົງມາຈາກບ່າ. ຄົນຜູ້ນັ້ນຍິ້ມ, ກຸມມືຂອງຂ້າພະເຈົ້າໄວ້.

- ຂອບໃຈເຈົ້າຫລາຍໆ, ຂ້ອຍຄຶດວ່າພຽງແຕ່ເອົາກ້ອນດິນຈີ່ນີ້ສອດເຂົ້າໄປໃນເອິກເສື້ອແລ້ວຕິດກະດຸມໄວ້ແຫນ້ນໆກໍພໍ. ເວົ້າທີ່ວໄປແລ້ວບໍ່ຈໍາເປັນຈະໃຊ້ເຊືອກຜູກກ້ອນດິນຈີ່ໃສ່ຄໍດອກ, ແມ່ນບໍ່ລະ.

ຂ້າພະເຈົ້າຄ່ອຍຖາມດ້ວຍຄວາມວິຕົກ:

- ທ່ານ ຊິເຮັດຫຍັງລະ?

- ຂ້ອຍເຊື່ອວ່າເຈົ້າຊິເດົາອອກແລ້ວ? - ລາວຫົວເຮັດສິບເບະອອກມາ. - ປີນຂຶ້ນເທິງຂອບລູກຕຶ່ງແລ້ວສັກຫົວລົງສູ່ນະຮົກແຫ່ງນີ້. ກ້ອນດິນຈີ່ຈະຊ່ວຍໃຫ້ຂ້ອຍຈົມລົງພື້ນນໍ້າໄດ້ໄວ.

- ຊັ້ນຫວະ... - ຂ້າພະເຈົ້າແປກໃຈຕໍ່ການເປີດອົກເປີດໃຈນັ້ນ.

- ອະຮື່... ຄັນຊັ້ນເຈົ້າຄຶດວ່າຕໍ່ຫນ້າເຈົ້າ ດຽວນີ້ແມ່ນນັກອຸກົກກະສາດພວມສົນໃຈເກືອງຄວາມເລິກຂອງກົດຈະກໍານີ້ ເພື່ອເປົ້າຫມາຍທາງວິທະຍາສາດຊັ້ນຫວະ?

ລາວເວົ້າພຸ່ມໆຢູ່ຄືກັບພວມຈະໂມໂຫບ້າບ່ວງຂຶ້ນ ສ່ວນຂ້າພະເຈົ້າຮູ້ສຶກອະເຫຍືອງຄຶງຂຶ້ນມາ.

- ບໍ່ຄວນເຮັດຈັ່ງຊັ້ນທ່ານ!

ແຕ່ລາວຊໍ້າແນມເບິ່ງຂ້າພະເຈົ້າດ້ວຍຄວາມດູຫມິ່ນສຸດຂີດ, ຈົນພາໃຫ້ຂ້າພະເຈົ້າຕ້ອງກອຍຫລັງ. ສ່ວນລາວຊໍ້າແຜດສຽງຜ່ານຫວ່າງແຂ້ວອອກມາ.

- ອະຮື່... ບາງທີເຈົ້າອາດຈະເປັນຄຸນພໍ່ຢູ່ໃນໂບດ. ເຈົ້າສອນໃຫ້ທຸກຄົນເວັ້ນບາບທໍາບຸນແມ່ນຕິ? ຫລືວ່າເຈົ້າອາດຈະເປັນນັກໂຄສະນາໃຫ້ແກ່ສະມາຄົມສະຫມອງໄມ້ຈົ້ມແຂ້ວໃຫ້ແກ່ຄົນຫວ່າງງານ? ບໍ່ຫວະ? ເອີ... ຂ້ອຍເດົາອອກແລ້ວ. ເຈົ້າເປັນລູກຊາຍຂອງເສດຖີຜູ້ໃດຜູ້ຫນຶ່ງເຊິ່ງມີນີ້, ໄປຫາຄວາມເພີດເພີນຈາກການຜະຈົນໄພແມ່ນບໍ່, ເຈົ້າບ່ຽນເສື້ອທາງກັງແລະຊົບມືຂາວດ້ວຍຊຸດຂາດສ້ອຍນີ້ຕິ. ນີ້, ເພື່ອນເອີຍ, ກ້າເຈົ້າຢືນຢູ່ໃນສະພາບແວດລ້ອມແບບຂ້ອຍນີ້ແລ້ວ ບາງທີເຈົ້າອາດຈະບໍ່ຂັດຂວາງຂ້ອຍເລີຍ, ແຕ່ຍັງຈະແກ້ສາຍພາຍສິ້ງຂອງຕົນອອກມາຜູກກ້ອນດິນຈີ່ໃສ່ຄໍໃຫ້ຂ້ອຍອີກ, ແລ້ວອວຍພອນໃຫ້ຂ້ອຍນອນຫລັບຝັນດີ ແລະສັນຍາວ່າຈະປະຕິບັດຄໍາສະເຫນີທີສອງຂອງຂ້ອຍໃຫ້ສໍາເລັດ...

ຍ້ອນຄວາມແປກໃຈເກີນໄປ ຂ້າພະເຈົ້າເລີຍບໍ່ຕັດບົດກະແສຄວາມເວົ້າທີ່ເຕັມໄປດ້ວຍລັກ

ສະນະສງດສີອັນເຜັດມັນແລະຄວາມໂກດເຄັນເຄັນແຄັນຂອງລາວນັ້ນ. ໄລຍະນີ້ມານີ້ ຂ້າພະເຈົ້າຊິນເຄີຍກັບສຳນວນຄວາມເວົ້າແບບນັ້ນມາແລ້ວ. ດ້ວຍຈັງຫວະອັນເຂັ້ມແຂງຂອງຄົນຜູ້ທີ່ຕັດສິນໃຈກະທຳທຸກສິ່ງທຸກຢ່າງລົງໄປນັ້ນ, ຄົນແປກຫນ້າຜູ້ນີ້ຍັດກ້ອນດິນຈີ່ເຂົ້າໄປໃນເອິກເສື້ອ ແລະເວົ້າຍ້ອນຄືນດ້ວຍສຽງຢຸດໆຍ່ອນໆແລະງ່າຍດາຍ:

- ແມ່ນແລ້ວ, ຄຳຮ້ອງຂໍ້ທີ່ສອງ. ເມື່ອເຫັນຝອດຂອງຂ້ອຍຟົດຂຶ້ນມາຈາກພື້ນນ້ຳທີ່ເລິກເກືອງສິບຫ້າຟຸດນີ້, ບາງທີພວກສາລະວັດຈະປະກົດຕົວຂຶ້ນ. ພວກເຂົາເຄີຍຂີ່ລົດຈັກເລາະຕາມທາງເສັ້ນນີ້. ຂ້ອຍຂໍເພິ່ງເຈົ້າເວົ້ານຳພວກເຂົາວ່າ, ບໍ່ມີເລື່ອງຫຍັງດອກ. ບໍ່ຊັ້ນພວກເຂົາຈະໃຊ້ຂໍເຫລັກຢັ່ງຫາ. ພວກເຂົາບໍ່ຫມັ້ນພໍທີ່ຈະມຸດເອົາຂ້ອຍຂຶ້ນມາດອກ, ແຕ່ກໍອາດຈະເອົາຂໍເຫລັກເຈາະກຶກຕາຂອງຂ້ອຍແມນອອກ. ເຊື່ອວ່າມັນອາດສາມາດເປັນໄປໄດ້ ແຕ່ຂ້ອຍຢາກໄປສະຫນີຕົວຕໍ່ໂລກເບື້ອງນັ້ນດ້ວຍຮູບຮ່າງອັນສົມບູນແລະຕາທັງຄູ່ນີ້ເດັດຂາດວ່າຈະຕ້ອງ ໃຫ້ມັນຍັງປອດໃສຢູ່ຄືເກົ່າ. ເຈົ້າສັນຍາວ່າຈະຊ່ວຍຂ້ອຍໄດ້ຫລືບໍ່? ຄົນຊັ້ນກໍຂອບໃຈຫລາຍໆ...

ຂ້າພະເຈົ້າຮ້ອງຂຶ້ນ:

- ຟ້າວ, ຟັງຂ້າພະເຈົ້າເວົ້າກ່ອນ! ...

ແຕ່ຄົນຜູ້ນັ້ນໃຊ້ມືທັງສອງຈັບຂອບລູກຕັ່ງແລ້ວ ແລະຕຽມພ້ອມທີ່ຈະໂດດຂ້າມຂອບນັ້ນລົງນ້ຳ. ລາວຈ້ອງມອງເບິ່ງຂ້າພະເຈົ້າ:

- ເວົ້າໄວໆແດ່, ຂ້ອຍບໍ່ມີເວລາລໍຖ້າ.

ຂ້າພະເຈົ້າແຄັນອຶກໄປບາດຫນຶ່ງຍ້ອນຄວາມວິຕົກ. ຂ້າພະເຈົ້າບໍ່ຕ້ອງການໃຫ້ຄົນຮ່າງນ້ອຍຜູ້ນີ້ຕາຍດຶກນ້ຳ ແລະຟົດເປັນຝອດຂຶ້ນມາຈາກພື້ນນ້ຳທີ່ເລິກເກືອງສິບຫ້າຟຸດນັ້ນຈັກຫນ້ອຍເລີຍ.

- ທ່ານ ... - ຂ້າພະເຈົ້າເວົ້າດ້ວຍຄວາມກະວົນກະວາຍ. - ຫວັງວ່າທ່ານຈະເຊື່ອຂ້າພະເຈົ້າ, ຂ້າພະເຈົ້າເອງເຄີຍຕົກຢູ່ໃນສະພາບຂັບຂັນມາຫລາຍ ຄັ້ງຫລາຍຫົນແລ້ວ ຄວາມຫມອງໄຫມ້ຂົມຂື່ນມັນພົກຈອບເອົາຂ້າພະເຈົ້າຄືດັ່ງລູກກະສຸນຈອບເອົາຊີວິດໄກ່ຂວານີ້ແຫລະ. ແຕ່ຂ້າພະເຈົ້າກໍຍັງມີຄວາມຫວັງຢູ່ ...

ລາວຫົວ.

- ເຈົ້າມັນແມ່ນນັກສະແດງລະຄອນຕະລົກຜູ້ໜຶ່ງ. ບາງທີຊີວິດຫາກດົນຫູເຈົ້າຄ່ອຍໆ ພຽງສອງສາມບາດເທົ່ານັ້ນໜຶ່ງດອກ. ຍັງບໍ່ທັນເຖິງຄາວທີ່ມັນຊຸດເຈົ້າດ້ວຍ "ໝັດ" ຄາງ ບົງວແລະແຕກແສງທີ່ງທ້ອຍຍາບໆຢູ່ໃນຕາເທື່ອ. ຈັ່ງໃດ? ຄາງຍັງດີຢູ່ດີ? ເອີ... ເຈົ້າຢາກ ເວົ້າຫຍັງ? ສະເໜີບໍ່ໃຫ້ຂ້ອຍໂດດລົງນ້ຳຊັ້ນຫວະ?

ຄວາມສຳນຶກເກົ່າກ່ຽວກັບເວທີສະແດງປະກົດຕົວຂຶ້ນໃນຈິດສຳນຶກຂອງຂ້າພະເຈົ້າ ແວບ ໜຶ່ງ, ແລະຂ້າພະເຈົ້າຕອບແບບເດັດດ່ຽວອອກໄປວ່າ:

- ຈ້າວ.

ຂະນະທີ່ເວົ້າແບບນີ້ຢູ່, ຕົວຂອງຂ້າພະເຈົ້າເອງກໍຢາກຈະກອບກູ້ເອົາຕົນເອງອອກຈາກ ຄວາມຜິດຫວັງຂອງຕົນຢູ່. ເຖິງຈັ່ງໃດໄດ້ ຂ້າພະເຈົ້າເອງກໍໄດ້ເລືອກເອົາຮ່ອງນ້ຳທີ່ປ່ຽວພອຍ, ຫ່າງຈາກທາງລົດແຫ່ງນີ້ດ້ວຍຈຸດປະສົງອັນດຽວກັນກັບຄົນແປກປະຫລາດຜູ້ນີ້. ກະເປົາທີ່ບັນ ຈຸຫີນແຮ່ຢູ່ເຕັມອັດນີ້ຈະຊ່ວຍຈ່ອງຂ້າພະເຈົ້າລົງສູ່ພື້ນໄດ້ໄວກ່ວາກ້ອນດິນຈີ່, ແລະຂ້າພະເຈົ້າ ອາດຈະເດີມພັນຮ້ອຍກີບໜຶ່ງເລີຍວ່າ ຂ້າພະເຈົ້າຈະເປັນຜູ້ໄປຮອດຈຸດທີ່ໝາຍກ່ອນເພິ່ນໃນ ຄວາມເລິກເຖິງສິບຫ້າຟຸດນັ້ນ.

ຄົນແປກໜ້າຜູ້ນັ້ນເວົ້າດ້ວຍຄວາມຄົນຄຶດ:

- ແຕ່ພວກເຮົາຈະສາມາດຝາກຄວາມຫວັງໄດ້ກັບຫຍັງອີກ?

ຂ້າພະເຈົ້າຟ້າວຄ້ວາເອົາປະກາຍແຫ່ງຄວາມຫວັງທີ່ມີເທົ່າແສງແມງທີ່ງທ້ອຍນັ້ນ, ແລະ ເວົ້າອັບອຶ້ງຂຶ້ນວ່າ:

- ພວກເຮົາຈະໄປ ເວສະລີ ແລະ ລອງໄປຂໍອາໄສນອນຢູ່ກັບສະມາຄົມ ກອບກູ້ຄົນມີກຳ ນັ້ນເບິ່ງ.

ເພື່ອແທນຄຳຕອບໃຫ້ແກ່ຂ້າພະເຈົ້ານັ້ນ, ລາວກັດແຂ້ວຂຶ້ນກາດໆ:

- ເອີ... ເພື່ອນໜຸ່ມເອີຍ, ຄັນຊັ້ນເຈົ້າບໍ່ຄຶດຫາແຜນການຫຍັງທີ່ດີກ່ວານີ້ໄດ້ແດ່ຫວະ? - ສຽງເຍາະເຍີ້ຍຄືເມື່ອກ່ອນນັ້ນດັງຂຶ້ນມາອີກ. - ຈະຢືນລຽນແຖວລໍຢູ່ເທິງເດີ່ນນຳກັນກັບພວກ "ມີກຳ" ອື່ນໆຄືພວກເຮົານີ້ຈົນເຖິງສອງໂມງເຊົ້າຊັ້ນຫວະ? ແລ້ວຫລັງຈາກນັ້ນ ກໍຊຸກຊີງກັນ ຫມົ້ນເຂົ້າສູ່ຫ້ອງອຸ່ນ ເພື່ອໃຫ້ພວກຍານາງເຖົ້າເພິ່ນບັງຄັບໃຫ້ພວກເຮົາຮ້ອງເພງສະດຸດີເຍຊູ

ແລະຟັງອີ່ຕາບັກບວດເກົ້ານັ້ນເທດສະຫນາທຳດ້ວຍຫົວເລື່ອງ "ຈົ່ງທຳຄວາມດີເພື່ອເອົາຊະນະຄວາມຊົ່ວ" ນັ້ນຫວະ? ບໍ່ລະ, ຂໍຂອບໃຈລະເດີ...

- ແຕ່ຢ່າງຂີ້ຮ້າຍ ພວກເຮົາກໍຍັງຈະໄດ້ແກງເຂົ້າຟ່າງຈັກກ້ວຍແລະບ່ອນຊຸກຫົວນອນຢູ່ຕ່ວາ, - ຂ້າພະເຈົ້າຂັດຂືນລາວດ້ວຍທ່າດື້ດຶງໂດຍທີ່ໂຕຂ້າພະເຈົ້າເອງບໍ່ສາມາດເຂົ້າໃຈໄດ້ ບາງທີໃນຈິດໃຈຂອງຂ້າພະເຈົ້າກໍຄືງຢາກສວຍໃຊ້ຄວາມເວົ້າດັ່ງກ່າວນັ້ນເພື່ອເລີກລົ້ມເຈດຕະນາທີ່ບໍ່ສາມາດຈະຫລີກລ່ຽງໄດ້ນັ້ນຄື ການໂດດລົງນ້ຳພ້ອມກັບກົງບັນຈຸຫີນແຮ່.

ຄົນຜູ້ນັ້ນຫີບຕາ ແລະເຮັດຫນ້າຫຍຸ້ງເຂົ້າແຍງເບິ່ງຂ້າພະເຈົ້າແຕ່ຫົວຈຳຕີນ.

- ບາງທີພວກເຮົາບໍ່ຄວນໄປ ເວສະລີ, ແຕ່ໄປທີ່ ຜາສາດ ໂອນມາອູນອັນແສນສວຍງາມນັ້ນເຫາະ? ພວກເຮົາຈະໄປຂ້າງປະຕູປ່ອງຢ້ຽມຫ້ອງນອນຂອງທ່ານເຈົ້າຂອງຜາສາດຜູ້ມີກະລຸນາທິຄຸນນັ້ນ ແລະວິງວອນ: "ຂ້າແດ່ທ່ານ, ຮຽນເຈົ້ານາຍທີ່ສຸດແສນເຄົາລົບນັບຖື! ຂໍທ່ານຈົ່ງຫງ່ງຫູຟັງຄຳອະທິການຂອງຂ້າຈັກສອງສາມຄຳແດ່ເກີດ! "ທ່ານເຈົ້າຂອງຜາສາດຈະອອກມາທີ່ລະບຽງ, ຫລືໄຂບານປະຕູປ່ອງລົມແລ້ວປ່ອນຫົວທີ່ສວມຫມວກນອນນັ້ນອອກມາ. ແລ້ວເພິ່ນກໍຈະເວົ້າວ່າ: "ສະບາຍດີພວກທ່ານ. ຂ້າພະເຈົ້າຄວນຈະເຮັດຈັ່ງໃດບໍ ເພື່ອຕອບສະຫນອງກັບການມາຢ້ຽມຢາມຂອງພວກທ່ານໃນຄັ້ງນີ້?" ຂະນະນັ້ນ ພວກເຮົາຈະກົ້ມຂາບລົງດ້ວຍຄວາມເຄົາລົບ: "ແຕ່ເຊົ້າວານນີ້ມາ, ພວກເຮົາບໍ່ທັນມີຫຍັງຕົກທ້ອງພໍຄຳເລີຍ ແລະພວກເຮົາກໍບໍ່ມີບ່ອນປອນຫົວຫລຸບຊຸບຫົວນອນພໍຈະຜ່ານຄືນໄປເລີຍ". ແນ່ນອນວ່າມີຄວາມອາດສາມາດທີ່ສຸດທີ່ທ່ານເຈົ້າຂອງຜາສາດຈະຕອບມາວ່າ: "ຊັ້ນຈະໃຫ້ເຮົາເຮັດຈັ່ງໃດ?" ແລະພວກເຮົາກໍວິງວອນອີກ: "ເກີງຈັ່ງໃດທ່ານກໍຄືງຈະຊ່ວຍເຫລືອພວກເຮົາໄດ້ແດ່ຈັກເລັກຈັກຫນ້ອຍຕີບໍ? ພວກເຮົາເຄີຍໄດ້ຍິນຄຳຊ່າລືກ່ຽວກັບຄວາມມີນ້ຳໃຈເມດຕາປານີຢ່າງບໍ່ມີຂອບເຂດຂອງທ່ານ. ຂໍພຽງແຕ່ທ່ານກະລຸນາເກື້ອກູນເຂົ້າເຫລືອແລງແກງເຫລືອຫມໍ້ອັນງ່າຍດາຍໃຫ້ພວກເຮົາກໍຈະເຮັດໃຫ້ພວກເຮົາມີຄວາມພໍໃຈຍິ່ງແລ້ວ. ແລະເສື້ອຄຸມພື້ນເກົ່າຂອງທ່ານນັ້ນອີກ, ພວກເຮົາຈະໃຊ້ມັນຕາງຜ້າຫົ່ມ. ມື້ອື່ນເຊົ້າພວກເຮົາຈະຂາຍມັນໃຫ້ພວກຄ້າຂອງເກົ່າແລ້ວພວກເຮົາກໍຈະມີຊີວິດຢ່າງອີ່ມຫນຳສຳລານຢູ່ຕັ້ງເປັນອາທິດ..."

ຂ້າພະເຈົ້າຖາມດ້ວຍຄວາມແປກໃຈ:

- ທ່ານເຈົ້າຂອງຜູ້ມີເມດຕາຈິດແຫ່ງພາສາດໂອນມາອູບນັ້ນຫວະ? ເປັນໄປໄດ້ບໍ່ວ່າເພິ່ນຄືນມາແລ້ວ?

- ເຈົ້າເວົ້າເຖິງໃຜຫັ້ນ? - ລາວແບມືແບບປະຕິເສດ. - ພວກເຂົາມັນຄືກັນທັງນັ້ນແຫລະ... ຈັ່ງແມ່ນເປັນຕາຢາກຫົວ... ກ່ອນທີ່ເຈົ້າຈະອ້າປາກຮ້ອງຂໍນັ້ນບັກຍາມປະຕູໂຂງຂອງພາສາດກໍຈະໃຫ້ພວກເຮົາສັງເວີຍຫມັດກຳປັ້ນແບບນີ້... - ລາວແຜດສຽງຂຶ້ນຄືກຶກງູກັດ: - ແຕ່ຂ້ອຍບໍ່ຕ້ອງການແບບນັ້ນ, ເຂົ້າໃຈດີ! ຂໍລາກ່ອນຊົ່ວນິລັນດອນ!

ລາວເລີ່ມປີນຂ້າມຂອບຕຶກເຫລັກນັ້ນໄປ.

- ຟ້າວກ່ອນ! - ຂ້າພະເຈົ້າທັງຫັນໃຈຫອບທັງເວົ້າເປັນສຽງຜ່າວໆ. ຢູ່ຜູ້ດຽວເທິງໂລກຫນ່ວຍນີ້ ຈັ່ງແມ່ນເປັນຫນ້າສະຫຍອງຂວັນ, ແລະຂ້າພະເຈົ້າກໍຕັດສິນໃຈ. ມືສອງກ້ຳຂອງຂ້າພະເຈົ້າສັ່ນເຊັນ, ຂ້າພະເຈົ້າຮັດສາຍກົງເຂົ້າແຫນ້ນໆ, ຕຽມພ້ອມກ້າວເຂົ້າສູ່ການທັດສະນາຈອນກັ້ງວສຸດທ້າຍນີ້. - ກ້າຂ້ອຍຄາວຫນຶ່ງກ່ອນ, - ຂ້າພະເຈົ້າເກືອບຈະໄຫ້ໂກກໆຂຶ້ນ. - ພວກເຮົາໄປນຳກັນ... ຂ້ອຍກັບເຈົ້າ...

ລາວອ້າປາກຊາບງາບຂຶ້ນເພາະຄວາມແປກໃຈແລະກອດຕີນ ທີ່ຢ່າງຂ້າມຂອບລູກຕຶ່ງໄປແລ້ວນັ້ນຄືນມາຍັງຊຸມນ້ອຍທີ່ປຽກເປື້ອນໄປດ້ວຍນ້ຳຫມອກແຄມຮ່ອງນ້ຳນັ້ນ.

- ພວກເຮົາບໍ່ໄດ້ສັນຍາກັນແນວນີ້ຕ່ວາ. - ລາວຍິ້ມໂສກໆ. - ເຈົ້າຮູ້ບໍ່ວ່າ, ບັນຫານີ້ຈະບໍ່ມີຜົນຫຍັງເລີຍ, ແລະທັງເປັນເລື່ອງຊົ່ວຮ້າຍທີ່ສຸດອີກດ້ວຍ. ນີ້ນະ, ຂ້ອຍເຂົ້າໃຈດີທີ່ສຸດ, ຫາລະປ່ອຍໃຫ້ຂ້ອຍໄປຜູ້ດຽວສາ. ເຈົ້າຍັງຫນຸ່ມ, ປານນັ້ນກໍຍັງຈະຫລີບຫລີກຈາກການສູ້ຊີນຫວະ? ບໍ່ໄດ້, ຂໍໃຫ້ຂ້ອຍໄປຜູ້ດຽວສາ.

ລາວຊ້ຳຢ່ວງຕີນຂ້າມຂອບລູກຕຶ່ງໄປອີກ.

ຂ້າພະເຈົ້າແຄ້ນນ້ຳຕາ ແລະພຶມພຳຢູ່ດ້ວຍຄວາມວິຕົກ.

- ບໍ່ໄດ້, ຂ້າພະເຈົ້າບໍ່ປ່ອຍໃຫ້ທ່ານໄປຜູ້ດຽວດອກ!...

ຄົນຜູ້ນັ້ນນັ່ງຢູ່ເທິງຂອບລູກຕຶ່ງ, ຫັນຫລັງໄປທາງຮ່ອງນ້ຳແລະລູບງວງດັງຢູ່ດ້ວຍຄວາມຄັ້ນຄຶດ.

- ອື... ດຽວນີ້ ເບິ່ງເຈົ້າປະກົດວ່າມີວາດຊົງທະນົງອົງອາດ ຄືກັບວ່າ ເມື່ອກ່ອນນີ້ເຈົ້າເຄີຍ

ເປັນຄົນຮັກສາຕາປະທັບແຫ່ງລາຊະອານາຈັກນີ້ແຫລະ. ກ້າບໍ່ຍອມອະນຸຍາດໃຫ້ເຈົ້າລົງໄປນີ້ນຳກັນແລ້ວກໍ, - ລາວຊີ້ມືລົງໃສ່ໜ້ານ້ຳທີ່ດຳຈົ່ມກົ່ມນັ້ນ, - ຂ້ອຍຈຳເປັນຕ້ອງຢູ່ທີ່ນີ້ນຳເຈົ້າ. - ລາວຈົກເອົາກ້ອນດິນຈີ່ອອກມາຈາກເອິກເສື້ອມາງອຍໄວ້ເທິງຂອບລຸກຕົ່ງ. - ດຽວນີ້ຮອດທີເຈົ້າ ເພື່ອນໜຸ່ມເອີຍ, ຂ້ອຍບໍ່ມັກຂອງຢູ່ໃນກົງເຈົ້າຫັ້ນ, - ລາວເວົ້າຕື່ມດ້ວຍຄວາມຮັກແພງສະໜິດສະໜົມ.

ຂ້າພະເຈົ້າໜ້າແດງວື້ນ, ທັງປາກພຶມພຳດ້ວຍຄວາມເວົ້າບໍ່ເຂົ້າບໍ່ອອກຫຍັງເລີຍ. ຄົນຜູ້ນັ້ນໄດ້ເຮັດໃຫ້ຂ້າພະເຈົ້າມີກຳລັງໃຈຂຶ້ນມາ.

- ບໍ່ຕ້ອງອາຍ, ໃນຊີວິດຄົນເຮົາບໍ່ວ່າເລື່ອງຫຍັງກໍອາດສາມາດເກີດຂຶ້ນໄດ້ສະເໝີ. - ລາວເຮັດຕາຫີບແລະຫົວຢ່າງຍິ້ມແຍ້ມແຈ່ມໃສ. - ແມ່ນຕິເພື່ອນ? ກົ້ມຫີນລົງນ້ຳ, ສ່ວນພວກເຮົາຈະພ້ອມກັນຢູ່ຕໍ່ໄປຕິ?

ລາວກົ້ມຫີນລົງນ້ຳຊ່ວຍຂ້າພະເຈົ້າແລະໃນທີ່ສຸດກໍໂຍນທັງກ້ອນດິນຈີ່ຂອງຕົນລົງໄປ.

- ພວກເຮົາໄປນຳກັນເນາະ? - ຂ້າພະເຈົ້າຖາມພ້ອມທັງສຶກກົງເປົ່າຂຶ້ນບ່າ.

- ໄດ້ກ້າເຈົ້າຕ້ອງການ.

ຈັ່ງແມ່ນຂ້າພະເຈົ້າເມື່ອຍກັບຊີວິດອັນໂດດດ່ຽວປ່ຽວພອຍນີ້ເຫລືອທີ່ສຸດແລ້ວ, ເພາະການພົບປະອັນບັງເອີນຄັ້ງນີ້ໄດ້ດຶງເອົາຂ້າພະເຈົ້າອອກຈາກຄວາມຄຶດອັບປະມົງຄຸນເຫລົ່ານັ້ນແລະໄດ້ນຳເອົາຄວາມຫວັງນ້ອຍໆອັນໜຶ່ງພົ້ນມົວໆມາສູ່ຈິດໃຈຂອງຂ້າພະເຈົ້າ.

- ຄົນອັບໂຊກຜູ້ໜຶ່ງຍັງຈະຕ້ອງການຫຍັງລື່ນໄປກວ່ານີ້ອີກ?

ຂະນະນີ້ຄົນແປກໜ້າຈັບມືຂ້າພະເຈົ້າດ້ວຍຄວາມສະໜິດສະໜົມ:

- ເອົາລະ, ພວກເຮົາມາທຳຄວາມລື້ງເຄີຍນຳກັນ ... ຊື່ຂອງຂ້ອຍຄື ໂດບີ.

- ສ່ວນຂ້ອຍຄື ເຊມຸຍແອນ.

- ດີໃຈຫລາຍ. ຂ້ອຍນີ້ແຫລະ ຄົນອັບໂຊກລຸ້ນອາວຸໂສນັ້ນເອງ. ມື້ນີ້ໂຊກໄດ້ເຂົ້າຂ້າງຂ້ອຍ.

- ຍ້ອນມັນໄດ້ສົ່ງຊີວິດຄືນມາໃຫ້ທ່ານແມ່ນຕິ? - ຂ້າພະເຈົ້າຖາມຢ່າງໄຮ້ດຽງສາ.

- ບໍ່ດອກ, ຂໍໂທດນຳເຈົ້າເດີ, ເຊມຸຍແອນ, ກ່ຽວກັບເລື່ອງກ້ອນດິນຈີ່ຫັ້ນ. ຂ້ອຍບໍ່

ເຄີຍຄິດຈະຂ້າຕົວຕາຍຈັກເທື່ອ, ແຕ່ຂ້ອຍເຫັນເຈົ້າມີວາດພິດຫວັງ, ອ່ອນເພຍແລະແນມສັກລົງໃສ່ຫມໍ້ນະຣິກອັນສະຍົດສະຫຍອງນີ້, ພາໃຫ້ຂ້ອຍ ...ເຈົ້າເຂົ້າໃຈດີ?

ຂ້າພະເຈົ້າສາມາດເຂົ້າໃຈທຸກຢ່າງດີ ເມື່ອແນມເບິ່ງໃບຫນ້າທີ່ກ້າຫານຂອງຄົນຜູ້ຮູ້ຈັກກັນໂດຍບັງເອີນນັ້ນແລະໃຫ້ຄຳຕອບລາວໄປດ້ວຍການຈັບມືແຫນ້ນໆ.

- ຂໍຂອບໃຈທ່ານຢ່າງສຸດໃຈ.

ໂດບີ ງຶກຫົວ:

- ບໍ່ເປັນຫຍັງດອກ. ເຈົ້າຮູ້ບໍ່ ເຊນຸຍແອນ, - ໂດບີບ່ອນມືເຂົ້າໄປໃນກະເປົາເສື້ອໃຫຍ່, - ປະກົດວ່າໃນກົງຂອງຂ້ອຍຍັງເຫລືອຢູ່ສອງສາມຫລຽນ ...

ລາວເວົ້າຮອດນີ້, ຂ້າພະເຈົ້າກໍໄດ້ງິນສຽງໂລຫະຊຸນກັນດັງແກ້ງໆຢູ່, ໃນໄລຍະສອງສາມອາທິດຜ່ານມານີ້ປະກົດວ່າຂ້າພະເຈົ້າລືມສຽງແບບນັ້ນໄປຫມົດແລ້ວ. ໂດບີ ໂຍນຫລຽນເງິນຂຶ້ນຢ່າງຄ່ອງແຄ້ວແລ້ວຈັບປັບເອົາໄວ້ໃນອຸ້ງມື.

- ພໍອຸ່ນທ້ອງຄາບຫນຶ່ງຢູ່ດີ? ໃຫ້ທ້ອງອີ່ມສາກ່ອນຈຶ່ງຄ່ອຍຄິດເກືອງການຊອກຫາບ່ອນນອນ, ແມ່ນບໍ່ລະ? ເອີ ... ຂ້ອຍຮູ້ບ່ອນຫນຶ່ງທີ່ສະດວກດີທຸກຢ່າງ. ບາງທີພວກເຮົາຈະກັບໄປບ່ອນຫັ້ນດີບໍ່?

ຂ້າພະເຈົ້າຫິວທີ່ສຸດແລ້ວ ແລະກໍບໍ່ຕ້ອງການປຶກສາຫາລືຫຍັງລື່ນເຫລືອໄປກ່ວານັ້ນອີກ. ຂ້າພະເຈົ້າຫາງງຽງຕົວ, ແລ້ວເວົ້າຕື່ມວ່າ:

- ອີກເທື່ອຫນຶ່ງຂໍຂອບໃຈທ່ານຢ່າງສຸດໃຈ.

ແຕ່ ໂດບີ ໃຊ້ນິ້ວມືຈິ້ມຫນ້າຜາກແລະປະກົດວ່າພວມຄິດໄລ່ອັນໃດອັນຫນຶ່ງຢູ່:

- ເອີ ... ພວກເຮົາຈຳເປັນຈະຊອກຫາບ່ອນຊຸ້ນຢູ່ໃກ້ໆຕົວເມືອງໃດເນາະ? ເຮືອນຂອງຂ້ອຍຢູ່ໃກ້ໆນີ້. ເຈົ້າຮູ້ບໍ່? ໄປເຮືອນຂອງຂ້ອຍເນາະ! ພຽງແຕ່ ບີນ ຜ່ານໂນນຫນ່ອຍຫນຶ່ງທີ່ຢູ່ໃກ້ກັບ ແອຊູໂອເອີ ແລ້ວເລາະໄປຕາມຮ່ອມພູທາງກ້ຳຊ້າຍນັ້ນໄປອີກເກືອບໄມຫນຶ່ງເທົ່ານັ້ນ ...

- ໄປຕາມເສັ້ນທາງນັກບຸນ ໂຟມາ? - ຂ້າພະເຈົ້າຖາມ.

- ແມ່ນແລ້ວ ... ເຈົ້າຮູ້ຈັກທ້ອງຖິ່ນແຖບນີ້ຫວະ, ດີຫລາຍ. ພວກເຮົາໄປເນາະ?

- ຈ້າວ.

ກ້າງຊາດາກໍຍັງຢາກຈະຍ່ອງຍີຂ້າພະເຈົ້າອີກ, ເອີ, ກໍຊ່າງມັນ. ຂ້າພະເຈົ້າບໍ່ຂໍຂັດຂືນ, ດຽມພ້ອມຕາມສິ້ນ ໂດບີ ໄປທຸກຫົນທຸກແຫ່ງ.

III

ຂ້າພະເຈົ້າບໍ່ຄ່ອຍຈະຊິນເຄີຍກັບພູມມິພາກແຫ່ງນີ້ດີພໍເທົ່າໃດ, ດັ່ງນັ້ນ ຈຶ່ງຍ່າງຕາມ ໂດບີ ໄປຢ່າງລະມັດລະວັງ, ເມື່ອລາວລ້ຽວເຂົ້າໄປໃນຮ່ອມແຄບແຫ່ງຫນຶ່ງເຊິ່ງໃນຍາມຄ້ອຍຄ່ຳເຊັ່ນນີ້ ມັນຊວນໃຫ້ຂ້າພະເຈົ້າຄຶດເຖິງທາງໃຕ້ດິນ "ນັກບຸນໂຟມາ" ອັນຍາວເຢັນທີ່ຂຶ້ນຊື່ລືນາມມານັ້ນ. ໂດບີຍ່າງໄປດ້ວຍບາດກ້າວອັນຍ່ອງເບົາແລະວ່ອງໄວ. ເມື່ອຍ່າງຫວິດຈາກຮ່ອມ, ມາຮອດເດີ່ນແຫ່ງຫນຶ່ງ ທ້ອງຟ້າກໍມືດລົງອັນເຮັດໃຫ້ສາມາດພໍແຕ່ຈຳແນກດ້ວຍຮົ້ວເຫລັກສູງໆເຫຼົ່ານັ້ນໄດ້ເທົ່ານັ້ນ. ປະຕູສວນນ້ອຍໆເຊິ່ງ ໂດບີ ໄຂອອກພາຍຫລັງທີ່ເຂົາໄດ້ຫມູນກຸນແຈຫນຶ່ງຮອບນັ້ນ ຫມາຍເຖິງໄລຍະເດີນທາງຕອນສຸດທ້າຍແຫ່ງການເຄື່ອນທັບເທິງບົກຄັ້ງນີ້. ປະຕູບ່ອງຢ້ຽມບ່ອງຫນຶ່ງ ໄດ້ສ່ອງແສງໂຄມໄຟອັນອ່ອນແອອອກມາຈາກຫວ່າງຕົ້ນໄມ້ສູງສອງສາມກົກເຊິ່ງພວມເອນອ່ຽງກິ່ງງ່າສາຂາຂອງມັນໄປກັບຫົວລົມແຫ່ງລະດູໃບໄມ້ຫລົ່ນ. ແສງສະຫວ່າງອັນນິ້ມນວນນີ້ຊວນໃຫ້ຂ້າພະເຈົ້າຄຶດເຖິງເຮືອນເຄີຍຢູ່ອູ່ເຄີຍນອນທີ່ ແອຊູໂອເຣີ ແລະຂ້າພະເຈົ້າກໍມີຄວາມສັງວອນສະອອນໃຈຍິ່ງທີ່ຢາກຈະກັບໄປດຳລົງຊີວິດຢູ່ພາຍໃຕ້ ຫລັງຄາເຮືອນດັ່ງກ່າວເຖິງຂັ້ນບໍ່ສາມາດຈະອົດກັ້ນຄວາມກະຕຸ້ນໃຈໄວ້ໄດ້ ແລະຫມາກຫົວໃຈຂອງຂ້າພະເຈົ້າກໍຕຳເຂົ້າຕຶກໆ...

- ເປັນອັນວ່າພວກເຮົາມາຮອດເຮືອນແລ້ວ.

ພາຍຫລັງທີ່ພວກເຮົາກ້າວຂຶ້ນຂັ້ນໄດສອງສາມຂັ້ນນັ້ນແລ້ວ, ໂດບີ ກໍໄຂປະຕູໃຫຍ່ອອກຢ່າງລະມັດລະວັງ ແລະຍ່າງຜ່ານປະຕູດັ່ງກ່າວເຂົ້າໄປ.

- ເຂົ້າມາແມ້, ເຊມຸຍແອນ. ຂ້ອຍຈະໃຕ້ໄຟຟ້າກ່ອນ...

ຈາກແສງສະຫວ່າງຂອງດອກໄຟຟ້ານັ້ນ, ຂ້າພະເຈົ້າສາມາດແນມເຫັນໄດ້ວ່າຢູ່ພາຍໃນຫ້ອງນອກທີ່ແຄບໆນັ້ນ ມີຂໍເກາະເສື້ອອັນຫນຶ່ງ, ໂຕະນ້ອຍຫນ່ວຍຫນຶ່ງ, ມີປະຕູໃຫຍ່ສອງ

ສາມປ່ອງສຳລັບຜ່ານເຂົ້າໄປຫ້ອງໃນ, ມີຂັ້ນໄດກວ້າງໆອັນໜຶ່ງລ່ວງຂຶ້ນຊັ້ນເທິງ.

- ນີ ເຊມຸຍແອນ, ແກ້ເສື້ອຄຸມຫັ້ນອອກ ແລ້ວໂຍນມັນກັບກຶງຫັ້ນເຂົ້າໄປໃນແຈຫ້ອງພຸ້ນ, - ໂດບີ ສະເໜີ. - ກູ້າເຫັນວ່າໃນກຶງນັ້ນບໍ່ມີສິນບັດອັນລ້ຳຄ່າຫລົງເຫລືອຢູ່ອີກແລ້ວ, - ລາວເວົ້າຕື່ມດ້ວຍທ່າທາງຍອກໃຍ.

ແຕ່ ໃນກຶງຂອງຂ້າພະເຈົ້າຈະມີຫຍັງເຫລືອຄ້າງຢູ່ອີກ. ແມ້ແຕ່ໃບປະກາດສະນີຍະບັດ ກໍຍັງສູນຫາຍໄປພ້ອມກັບຄະດີ ກາກເນໂຣ ພຸ້ນແລ້ວ. ຂ້າພະເຈົ້າລັ້ງໆລໍໆຢູ່. ຢູ່ດ້ານໃນເສື້ອຫຸ້ມຄີງຂອງຂ້າພະເຈົ້າບໍ່ມີຫຍັງເຫລືອຄ້າງຢູ່ເລີຍ ນອກຈາກເສື້ອຊ້ອນລາຍແຊກພືນຂາດໆທີ່ເຮັດດ້ວຍແພກັກ ເຊິ່ງຊວນໃຫ້ຂ້າພະເຈົ້າຄຶດເຖິງກຳປັ່ນ "ແມວຊຽວ", ແລະບໍ່ກ້າແກ້ກະດຸມເສື້ອທີ່ຍັງເຫລືອແຕ່ພຽງສອງໜ່ວຍນັ້ນອອກ.

ໂດບີ ຖາມຂ້າພະເຈົ້າຂຶ້ນວ່າ:

- ເຊມຸຍແອນ, ເຈົ້າຄຶດຫຍັງຢູ່ຫັ້ນ? ຕອນນີ້ ກູ້າໄດ້ອາບນ້ຳຮ້ອນຄືຊິດີກຫລາຍ. ແມ່ນບໍ່ລະ?

ຂ້າພະເຈົ້າບໍ່ນຶກບໍ່ຝັນເລີຍວ່າຈະໄດ້ຮັບສຸກຂະຕິອັນໜ້າລຸ້ນລຸ່ມນີ້. ໂດບີ ພືສິດໃຈຂ້າພະເຈົ້າໄດ້ຢ່າງສິ້ນເຊີງ. ຂ້າພະເຈົ້າຍ່າງຕາມຫລັງ ໂດບີ ເຂົ້າໄປໃນຫ້ອງນ້ຳ, ແລະຢູ່ທີ່ນີ້ເອງທີ່ຂ້າພະເຈົ້າໄດ້ປົດເປືອງເສື້ອຜ້າໜ້າແພຂາດຫ້ຽນເຫລົ່ານັ້ນ ກິ້ມໄປຢ່າງບໍ່ເສຍດາຍຕາຍຢາກເລີຍ.

- ເຈົ້າທາລະອາບໃຫ້ລີມໃຈ. ຄາວໜຶ່ງຂ້ອຍຈະເອົາເສື້ອຊ້ອນສະອາດແລະຊຸດນອນມາໃຫ້ເຈົ້າ. ຮຸ່ນຂ້ອຍແລະເຈົ້າຂະໜາດດຽວກັນ, ຂ້ອຍເຊື່ອວ່າເຈົ້າຈະນຸ່ງເຄື່ອງຂ້ອຍໄດ້ພໍດີ... - ລາວຈິ່ມໃສ່. ເມື່ອເຫັນໜ້າຂອງຂ້າພະເຈົ້າຍັງມີທ່າທີງຶງງວຍຢູ່, ລາວກໍເວົ້າຕື່ມ: - ຄົນໃຊ້ຂອງຂ້ອຍບໍ່ສະບາຍ. ຂ້ອຍບໍ່ຢາກລົບກວນລາວ.

- ຈ້າວ, ແມ່ນແລ້ວ, - ຂ້າພະເຈົ້າກໍຕອບດ້ວຍສຽງຄ່ອຍໆເໝືອນກັນ.

ຟອງສະບູອຸ່ນໆໄດ້ລູບໄລ້ໄກຄູ ຮ່າງກາຍຂອງຂ້າພະເຈົ້າຢ່າງນິ້ມນວນ, ມັນເຮັດໃຫ້ຂີ້ດິນ, ຂີ້ຝຸ່ນທີ່ເຕົ່າໂຮມກັນຢູ່ເທິງຮ່າງກາຍຂອງຂ້າພະເຈົ້າ ເປັນເກີບໃນທີພາລາຕີແຫ່ງການພະຈົນໄພຢ່າງບໍ່ມີບ່ອນຈະບ່ອນຫົວຫລຸບຊຸບຫົວນອນນັ້ນຜຸພຸ່ຍອອກ. ຂ້າພະເຈົ້າເມົາແຕ່ອາບ, ດັ່ງນັ້ນ

ເລີຍບໍ່ໄດ້ຄຶດສະເດືອກວ່າເປັນຫຍັງອີ່ຕາ ໂດບີ ນີ້ຈຶ່ງແປກປະຫລາດເຖິງພຽງນີ້, ແລະຢູ່ບໍ່ຢູ່ ລາວກໍເກັບເອົາຊາຍພະເນຈອນຜູ້ຫນຶ່ງທີ່ຄົນຖູຫີນ ເຂົ້າມາຢູ່ໃນເຮືອນຂອງຕົນເພື່ອຫຍັງກັນ.

ປະຕູຫ້ອງອາບອ້າງັບແງອອກ ແລ້ວຂ້າພະເຈົ້າກໍເຫັນແຂນຈ່ອຍໆຂອງ ໂດບີ ແກວ່ງແພເຊັດຫນ້າ, ຜ້າເຊັດຕີນ, ເສື້ອຊ້ອນ, ເຄື່ອງນຸ່ງຊຸດນອກແລະເກີບຄູ່ຫນຶ່ງຂຶ້ນໃສ່ຕັ່ງ. ຖົງຕີນສີຄູ່ຫນຶ່ງແລະກາລະວັດລາຍແຊກເສັ້ນຫນຶ່ງ ກໍຖືກນຳມາປະກອບໃສ່ຕື່ມເພື່ອໃຫ້ມັນຄົບຊຸດ.

ຂ້າພະເຈົ້າກ່າວຂອບໃຈກັບເຈົ້ານາຍ, ແລະໃນຂະນະນັ້ນ, ຂ້າພະເຈົ້າບໍ່ຕ່າງຫຍັງກັບເດັກນ້ອຍໄຮ້ດຽງສາຜູ້ຫນຶ່ງໄດ້ລອຍຫລິ້ນຢູ່ໃນອ່າງນ້ຳອຸ່ນຢ່າງບໍ່ໄດ້ຫຍຸ້ງສະຫມອງກັບເລື່ອງໃດໆ ທັງສິ້ນ. ເຖິງຈັ່ງໃດກໍຕາມ, ການຫລິ້ນມ່ວນໆຢູ່ໃນອ່າງນ້ຳອຸ່ນກໍຍ່ອມສະບາຍໃຈກວ່າຫລາຍ, ຖ້າທຽບໃສ່ການຈົມສັກສະຫມັກນ້ຳຢູ່ໃນພື້ນຮ່ອງເລິກໆ ແລະພົ່ນຝອດຟົດບ້ອກໆຂຶ້ນມານັ້ນ. ຂ້າພະເຈົ້າປ່ຽນນ້ຳໃນອ່າງເຖິງສອງຄັ້ງ. ໃນທີ່ສຸດກໍມີຄວາມຊື່ນໃຈ ເມື່ອເຫັນວ່າເນື້ອຫນັງຂອງຕົນມີສີ ມີວັນເປັນທຳມະຊາດຂຶ້ນມາ. ຂ້າພະເຈົ້າເຫັນວ່າເນື້ອຫນັງຂອງຕົນສະອາດດີ, ເຖິງແມ່ນວ່າໄລຍະຜ່ານມາບໍ່ດົນນີ້ ຕົນເອງໄດ້ສຳພັດກັບຄົນເປື້ອນເປິຂີ້ດຽດຈັງໄຮທຸກປະເພດມາແລ້ວກໍຕາມ.

ຫລັງຈາກລ້າງຕົນຕົວດ້ວຍນ້ຳເຢັນແລະນຸ່ງເຄື່ອງແລ້ວ, ຂ້າພະເຈົ້າກໍເກີດອຸກໃຈຂຶ້ນມາ ເພາະຢູ່ໃນຫ້ອງບໍ່ມີແວ່ນ, ແລະບໍ່ມີຮອດເຄື່ອງແຖຫນວດອີກຊ້ຳ. ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງບໍ່ແນ່ໃຈວ່າຕົນຮັດກາລະວັດຮຽບຮ້ອຍດີຫລືບໍ່, ຂ້າພະເຈົ້າໃຊ້ມືສາງຜົມຢູ່ເທິງຫົວໄປຊາມຊາ. ຕອນສຸດທ້າຍທີ່ຂ້າພະເຈົ້າໄດ້ອາບນ້ຳນັ້ນແມ່ນຜ່ານພົ້ນໄປໄດ້ສາມເດືອນແລ້ວ, ຄືອາບທີ່ເຮືອນນອນຄ້າງຄືນຂອງສະມາຄົມ ສະຕິ "ສົງເຄາະຜູ້ຍາກຈົນ". ແຕ່ນັ້ນມາຂ້າພະເຈົ້າກໍໄດ້ປະໃຫ້ຜົມເກີດຂຶ້ນຢ່າງເສລີ, ຫນວດເຄົາກໍແຜ່ຜາຍຂະຫຍາຍຕົວອອກຕາມໃຈຊອບຂອງມັນ.

ຂະນະນີ້, ຂ້າພະເຈົ້າພໍທີ່ຈະສາມາດຍິ້ມອອກໄດ້ແລ້ວ: "ແມ່ນບໍ່ຫວາ ພົນລືຂຶດໄດ້ຕ່າວປີ້ນໂຊກຊາຕາຂອງຂ້າພະເຈົ້າແລ້ວ?"

-ເຊີນ, ເຊນຸຍແອນ, -ຂ້າພະເຈົ້າໄດ້ຍິນສຽງເວົ້າຄ່ອຍໆຂອງ ໂດບີ. ລາວຢືນຢູ່ນອກປະຕູ, ນຸ່ງຊຸດສີຂີ້ເທົ່າທີ່ຄືກັນບັບກັບເຄື່ອງນຸ່ງຂອງຂ້າພະເຈົ້າ. -ເຈົ້າແຕ່ງໂຕເຂົ້າໄປແລ້ວເຮັດໃຫ້ຂ້ອຍຮູ້ສຶກວ່າເປັນຕາເບິ່ງພໍແລ້ວ. ພວກເຮົາໄປກັນເທາະ.

ທົ່ວຄີງຂອງລາວສົ່ງກິ່ນນ້ຳຫອມອ່ອນໆອອກມາ, ຕາທັງຄູ່ຂອງລາວຮຸ່ງໃສຂຶ້ນ, ບໍ່ມີວາດແຫ່ງຄວາມໂສກປ່ຽວຫ່ຽວອາລົມອີກຈັກດີ້ເລີຍ.

ຂ້າພະເຈົ້າຄຶດວ່າຕົນຜັນໄປເມື່ອ ໂດບີ ພາເຂົ້າໄປຍັງຫ້ອງອາຫານ. ນະທີ່ນັ້ນຢູ່ເທິງໂຕະມົນຫນ່ອຍນັ້ນ ມີຂອງແຊບໆທຸກຢ່າງວາງໄວ້: ກະປຸກຫມາກໄມ້, ຈານເຂົ້າຈີ່, ເນີຍ, ໄສ້ອົ່ວ, ນອກນັ້ນຍັງມີທັງເຕົ້າດອງກາເຟທີ່ພວມຍ້ອຍຊຶມໆ ຕັ້ງຢູ່ເທິງເຕົາໄຕ້ເຫລົ້າເກົ້າສິບນຳອີກ. ບາງທີຂ້າພະເຈົ້າອາດຈະຈົມລົງພື້ນຮ່ອງນ້ຳໄປກັບກົງຫີນແຮ່, ແລະພວມສົ່ງຜອດພົດບ້ອດໆຂຶ້ນມາຈາກຄວາມເລິກເກົ້າສິບຫ້າຟຸດນັ້ນຄັກແນ່ແລ້ວ, ແລະສິ່ງທີ່ເຫັນຢູ່ນີ້ ແມ່ນເປັນພຽງພາບສຳນຶກຂອງຂ້າພະເຈົ້າໃນຍາມໃກ້ຈະຕາຍນັ້ນກໍບໍ່ຈັກລະ? ຫລືວ່າແມ່ນຂ້າພະເຈົ້າພວມກົ້ງເກືອກລີເລືອຢູ່ໃນບ່ອນນອນພັກອາໄສຂອງໂບດແລະຜັນເຫັນສິ່ງທັງຫມົດເຫລົ່ານີ້ບໍ່?

ຂ້າພະເຈົ້າລັກບິດຫູຕົນເອງບາດເຈັບໆຢູ່.

- ນັ່ງລົງດີ, - ໂດບີ ສະເຫນີ. - ກິນໃຫ້ອີ່ມເດີ. ອາຫານຕ່າງໆເຫລົ່ານີ້ລ້ວນແຕ່ແມ່ນຂອງແທ້ໆທັງນັ້ນ. ບໍ່ມີແຕ່ເຫລົ້າ - ຂ້ອຍເອງບໍ່ດື່ມ ແລະກໍບໍ່ສົ່ງເສີມໃຫ້ໃຜດື່ມຄືກັນ.

ຂ້າພະເຈົ້າບໍ່ບັງຄັບໃຫ້ຕົນເອງອະທິຖານເລີຍ. ໂອຍ, ຂ້າແດ່ພະຜູ້ເປັນເຈົ້າແລະເທວະໂພມາ! ຈົ່ງອະໄພແດ່ຂ້າ, ຜູ້ມີກຳນີ້ດ້ວຍ! ໃນຫູຂອງຂ້າພະເຈົ້າດັງວູ່ງໆຂຶ້ນຄືກັບໂຮງສີເຂົ້າໃບລົມ, ແລະຄືກັນ້ຳທັງຫມົດຢູ່ ແອຊູໂອເອີ ທີ່ພວມອອກແຮງບີດເຂົ້າບະເລທີ່ເກັບກ່ຽວໄວ້ຕະຫລອດປີໃຫ້ເປັນແປ້ງໄປໃນຄືນດຽວນີ້ແຫລະ. ເມື່ອຂ້າພະເຈົ້າງັບແຂ້ວລົງໃສ່ຕ່ອນໄຂ່ຕົ້ມທີ່ອ່ອນນຸ່ມແລະຍັງຮ້ອນໆຢູ່ນັ້ນ ຂ້າພະເຈົ້າພໍ່ຢາກຈະຮ້ອງໄຫ້ຂຶ້ນເພາະຄວາມສະເທືອນໃຈ. ຂ້າພະເຈົ້າບໍ່ເຄີຍຄຶດມາກ່ອນເລີຍວ່າກະເພາະຂອງຄົນຜູ້ຫນຶ່ງຈະສາມາດບັນຈຸອາຫານສຳນັ້ນ ໄດ້ເກືອບຫມົດໃນບາດດຽວ. ອາຫານທຸກຢ່າງເຫລົ່ານັ້ນໄດ້ຫມົດສ້ຽງໄປໃນຊົ່ວພິບຍາມດຽວຄ້າຍດັ່ງຫົວລົມຮ້ອນທີ່ພັດຫອບເມັດຊາຍນັ້ນແລ້ວ. ຄວາມຈິງແລ້ວ, ຢູ່ໃນຈານຕ່າງໆເຫລົ່ານັ້ນກໍຍັງມີອາຫານເສດເຫລືອຢູ່ບາງເລັກນ້ອຍ. ແຕ່ແລ້ວຂ້າພະເຈົ້າກໍໄດ້ເທິງຫລັງລົງໃສ່ຕັ່ງດ້ວຍຄວາມອິດເມື່ອຍທັງຮູ້ສຶກທີ່ສ່ວາງກາຍສະບາຍອາລົມຍິ່ງ, ທັງຮູ້ສຶກວ່າມີອັນໃດອັນຫນຶ່ງຫນັກໆ ຢູ່ໃນກົ້ນກະເພາະແລະພ້ອມກັນນັ້ນກໍຄຶດວ່າຈະຕ້ອງລະມັດລະວັງແລະກິນອາຫານໃຫ້ສະໝ່ຳສະເຫມີ ພາຍຫລັງທີ່ອຶດຫິວມາເປັນເວລາດົນນານດັ່ງອາທິດເຊັ່ນນີ້.

ຫລັງຈາກດື່ມກາເຟຫມົດຈອກແລະພັບແພເຊັດປາກໄວ້ຮຽບຮ້ອຍແລ້ວ, ຂ້າພະເຈົ້າກໍເວົ້າຂຶ້ນວ່າ:

- ທ່ານ, ຂ້າພະເຈົ້າຂໍຂອບໃຈທ່ານຢ່າງສຸດໃຈ.

ໂດບີ ເຊີນຂ້າພະເຈົ້າສູບຢາຢ່າງສຸພາບຈາກການແນມເບິ່ງຢ່າງງຽບໆຂອງລາວ, ຂ້າພະເຈົ້າເຂົ້າໃຈໄດ້ໂລດວ່າຕົນຄວນຈະເລົ່າເລື່ອງລາວທີ່ເປັນມາຂອງຕົນໃຫ້ລາວຮູ້ຈັກ ຢ່າງແຈ່ມແຈ້ງ, ແຕ່ບໍ່ຄວນປະໃຫ້ລາວສະເຫນີກ່ອນ. ເປັນທີ່ແຈ່ມແຈ້ງວ່າໃນຕົວຂອງຂ້າພະເຈົ້າມີສິ່ງໃດສິ່ງຫນຶ່ງທີ່ພາໃຫ້ເຈົ້ານາຍປະຫລາດຜູ້ນີ້ມີຄວາມສົນໃຈແລະລາວກໍຄົງຢາກຮູ້ວ່າລາວໄດ້ພາໃຜເຂົ້າມາໃນເຮືອນຂອງຕົນ. ຂ້າພະເຈົ້າບໍ່ພຽງແຕ່ບໍ່ມີສິດປະຕິເສດແຕ່ຍັງຕ້ອງຕອບສະຫນອງເພື່ອສະແດງອອກມາເຊິ່ງນ້ຳໃຈແຫ່ງຄວາມຮູ້ບຸນຄຸນຕໍ່ການຕ້ອນຮັບອັນອົບອຸ່ນຂອງລາວ.

ຄວາມຄິດອັນຫນຶ່ງໄດ້ແລ່ນຕຳຂ້າພະເຈົ້າຢ່າງກະທັນຫັນຄືກັບງູ ເດີຢີເອີ ຫມົ້ນອອກມາຈາກພຸ່ມໄມ້: "ບາດຫາກຄົນແປກປະຫລາດຜູ້ນີ້ກາມ, ແລະຮັບຟັງການຜະຈົນໄພອັນສຸດແສນຊວຍຂອງຂ້າພະເຈົ້າຫມົດແລ້ວເວົ້າຂຶ້ນແບບບໍ່ມີເຍື່ອໄຍວ່າ: "ພໍແລ້ວ, ເພື່ອນທີ່ຮັກແພງເອີຍ, ເປັນອັນວ່າພວກເຮົາຄິດບັນຊີກັນຮຽບຮ້ອຍແລ້ວ, ເຈົ້າໄດ້ທົດແທນອາຫານການກິນຂອງຂ້ອຍດ້ວຍນິຍາຍເຫລົ່ານີ້, ບາດນີ້ຫາລະແກ້ສົ້ງເສື້ອອອກ, ນຸ່ງຊຸດຜ້າຂາດຂອງເຈົ້າຫັ້ນເຂົ້າໃສ່ ແລ້ວຫນີໄປໃຫ້ໄກ" ເດລະ? ເລື່ອງຫຍັງເຮົາຈຶ່ງຈະໄປເລົ່າເລື່ອງໃນຊີວິດຂອງຕົນສູ່ຜູ້ທີ່ກົ້ມເຂົ້າຈີ່ມາໃຫ້ນັ້ນຟັງຫມົດທຸກຢ່າງ? ເປັນໄປໄດ້ບໍ່ ລາວຈະສາມາດຈະເຂົ້າໃຈໄດ້ວ່າ ບາບກຳຂອງຂ້າພະເຈົ້າກໍຄືບໍ່ມີໃຜຕ້ອງການເກີງລະດັບການສຶກສາຂອງຂ້າພະເຈົ້າເທົ່ານັ້ນ? ເອີ, ໄລ່ຫນີຕາມສະບາຍໂລດທ່ານເອີຍ!...

ແຕ່ຄວາມຄິດຕ່າງໆທີ່ຕິດຕາມພວກງູ ເດີຢີເອີ ເຫລົ່ານັ້ນມາ, ກໍຄືພວກງູພິດ ລາເຄຍີເຊີ; "ຈັ່ງໃດ, ຈະຢູ່ໂດດດ່ຽວປ່ຽວເອກາ ຕາກແດດ, ແຂ່ງຝົນ ຊົ້ນຫິວນອນຢູ່ໃນຮ່ອມຫ້ວຍອີກເທື່ອໃຫມ່ຫວະ?"

ຂ້າພະເຈົ້າສະເດີດຂຶ້ນຄືກັບຫມາໂຕຫນຶ່ງທີ່ພວມກຶກເຂົາເຈົ້າດີຢ່າງບໍ່ຮູ້ເຫດຜົນ.

ແລ້ວຂ້າພະເຈົ້າກໍເລົ່າຄວາມຈິງສ່ວນຫນຶ່ງ, ກ່ຽວກັບຊີວິດເຍົາໄວ, ກ່ຽວກັບຕົວເມືອງມາດູພູມທີ່ນ້ອຍໆນັ້ນສູ່ ໂດບີຟັງ, ແຕ່ບໍ່ໄດ້ບອກຊື່ວ່າເປັນ ແອຊູໂອເອີ, ແລະກ່ຽວກັບເລື່ອງທີ່

ຂ້າພະເຈົ້າຕ້ອງຈັດເຊພະເນຈອນເຕັມໄປດ້ວຍການພະຈົນໄພ ເພື່ອສ້າງການະ ຍ້ອນຄວາມທຸກຈົນຂອງພໍ່.

ສຽງໂມງໄດ້ຕີບອກສິບສອງໂມງແລ້ວ. ໂດບີ ສູບກອກນັ້ນໝົດແລ້ວກໍນຳໄປງອຍໃສ່ຈານຊຸຂີ້ກອກຢາ. ກຸ່ມຄວັນບາງໆ, ຄ່ອຍໆຈາງອອກໄປແລະບິນຂຶ້ນສູ່ເກົ້າຕະກຽງທີ່ແຂວນຢູ່ເທິງໂຕະ. ເຈົ້ານາຍຍືນຂຶ້ນ, ຍ່າງໄປໆມາໆຢູ່ລະຫວ່າງກາງບ່ອງຢ້ຽມແລະໂຕະພົມໜ່ວຍນັ້ນ. ຄວັນຢາສູບກົວໄປມາແລະຫົວຂອງ ໂດບີ ພ້ອມກັບເຄົາແລະພົມຫຍຸ້ງໆລຸງລັງນັ້ນກໍປະກົດໃຫ້ເຫັນພໍມົບມ້າຍຢູ່ເທິງກຸ່ມເມກສີຂຽວຈ່າງນັ້ນ.

ໃນທີ່ສຸດ ໂດບີ ກໍເວົ້າຂຶ້ນ:

- ເອີ ເຊມຸຍແອນ, ນີ້ເດີ ຄືວ່າຂ້ອຍພວມຕ້ອງການຄົນຄືເຈົ້າຢູ່ພໍດີ.

ຂ້າພະເຈົ້າກົ້ມຫົວຕອບ:

- ທ່ານ ຂ້າພະເຈົ້າພ້ອມທີ່ຈະຮັບໃຊ້ທ່ານ. ຂໍທ່ານຈົ່ງໃຊ້ຂ້າພະເຈົ້າໄດ້ຕາມໃຈ.

ດ້ວຍດວງຕາອັນເຄັ່ງຄັດນັ້ນ, ໂດບີ ຈ້ອງມອງເບິ່ງຂ້າພະເຈົ້າ.

- ຂ້ອຍຕ້ອງການຄົນຜູ້ທີ່ກ້າຫານແລະເດັດດ່ຽວ, ປະຕິບັດຕາມຄຳສັ່ງຂອງຂ້ອຍຢ່າງບໍ່ມີເງື່ອນໄຂ, ຮູ້ຈັກປິດລັບແລະບໍ່ປ່ອນໜ້າເຂົ້າໄປຫຍຸ້ງວຽກທີ່ເຂົາເຈົ້າບໍ່ຕ້ອງການໃຫ້ຮູ້ຈັກ ...

- ຂໍໂທດທ່ານ, ຂ້າພະເຈົ້າຫວັງວ່າເກືອງຈັ່ງໃດກໍຈະບໍ່ແມ່ນວຽກແບບ ...

- ເອີ ... ເຈົ້າຍັງບໍ່ເຂົ້າໃຈຂ້ອຍເທື່ອ. ຢູ່ຊັ້ນເທິງແມ່ນຫ້ອງທົດລອງ, ໃນສາງຢູ່ກາງເດີ່ນນັ້ນແມ່ນບ່ອນລ້ຽງສັດທົດລອງ ...

- ງູຫວະ?

- ເອີ ... ງູຫຍັງ? ມັນແມ່ນພວກສັດທົດລອງປະເພດທຳມະດາສາມັນທີ່ສຸດ ... ກະຕ່າຍ, ໜູສະເພົາ, ໜູຣາດ໌, ໜູທຳມະດາ, ແມວ, ໝາ ...

- ຂໍ ອະໄພທ່ານ. ບາງທີມັນຄືຊິແມ່ນສວນສັດທີ່ກ້ວາງຂວາງສົມຄວນດີເນາະ. ຂ້າພະເຈົ້າກາມທ່ານ ເພາະຂ້າພະເຈົ້າເຄີຍເປັນຄົນບົວລະບັດສວນໃນສຳນັກງແຫ່ງໜຶ່ງມາແລ້ວ.

- ທີ່ ຢາວາ ຫວະ?

- ບໍ່, ທີ່ພະມ້າ.

- ຂ້ອຍບໍ່ເຄີຍໄດ້ງິນດັ່ງນັ້ນຈຶ່ງບໍ່ຮູ້ຈັກ, - ໂດບີ ແກວ່ງຫົວ. - ແຕ່ເລື່ອງນີ້ມັນບໍ່ສຳຄັນດອກ. ກ້າເຈົ້າຮູ້ຈັກເບິ່ງແຍງງູແລ້ວກໍຈະຮູ້ຈັກບົວລະບັດກະຕ່າຍ, ຊິເວົ້າຫຍັງສ່ຳ...

- ທ່ານ, ຂ້າພະເຈົ້າຈະພະຍາຍາມໃຫ້ສົມກັບຄວາມໄວ້ວາງໃຈຂອງທ່ານ.

ໂດບີ ຍິ້ມຢ່າງພໍໃຈ.

- ຫວັງວ່າຊິເປັນຈັ່ງຊັ້ນ. ເຈົ້າຈະຢູ່ນີ້ເລີຍ ແລະຮັບເງິນເດືອນພ້ອມ. ແຕ່ເຈົ້າຕ້ອງ... ເອີ... ບໍ່ໄດ້ໄປໃສໂດຍບໍ່ໄດ້ຮັບອະນຸມັດ. ບໍ່ໄດ້ອອກໄປນອກບໍລິເວນຮົ້ວເຫລັກທີ່ອ້ອມຄະລີຫາດຢູ່ນີ້. ເຈົ້າເຂົ້າໃຈດີ? ຍັງອີກ... ຫ້າມເຈົ້າແກຸຫນວດ... ເມື່ອຕ້ອງການ, ຂ້ອຍຈະແກຸໃຫ້ເຈົ້າດ້ວຍມືຂອງຂ້ອຍເອງ...

ເລື່ອງນີ້ມັນແປກປະຫລາດເຫລືອທີ່ສຸດ, ແຕ່ໃນຊີວິດຂອງຂ້າພະເຈົ້າເຄີຍພົບກັບຄົນພິດສະດານແບບນີ້ມາຫລາຍແລ້ວ.

- ທ່ານ, ຈັ່ງຊັ້ນກໍໄດ້, ທ່ານຈົ່ງແກຸໃຫ້ຂ້າພະເຈົ້າຕາມທີ່ທ່ານຕ້ອງການ. ແບບນີ້ຂ້າພະເຈົ້າກໍແຮງມັກ. ເພາະວ່າໃຜທີ່ມີເງິນຢູ່ໃນມືກໍຍ່ອມຈະສາມາດເຮັດໄດ້ຕາມໃຈຕົນເອງ.

- ເຈົ້າເວົ້າຖືກ, - ໂດບີ ເຫັນພ້ອມໂລດ. - ແຕ່ດຽວນີ້ ເຊີນເຈົ້າເຊັນສັນຍານ້ອຍໆອັນຫນຶ່ງກັບຂ້ອຍ.

ລາວດຶງເອົາປຶ້ມບັນທຶກນ້ອຍແລະປາກກາຊືມຄັນຫນຶ່ງອອກມາຈາກກົງເສື້ອ.

ຂ້າພະເຈົ້າຄິດວ່າຈະປະຕິເສດ, ແຕ່ຈະກອບຕົວມັນກໍສວາຍເສຍແລ້ວ.

- ດ້ວຍຄວາມຍິນດີ, - ຂ້າພະເຈົ້າພຶມພຳ ແລະຄຶດສະເດືອກຂຶ້ນມາໄດ້ວ່າຕົນໄດ້ເອົາສົ້ນໄມ້ຂີດໄປຂີດກັບໄພຢ່າງບໍ່ຮູ້ສຶກຕົວ.

ປາກກາຢູ່ໃນມືຂອງໂດບີ ແລ່ນລິດງຢູ່ເທິງຫນ້າເຈ້ຍ.

- ເຊີນເຈົ້າເຊັນຊື່... - ໂດບີ ເວົ້າ. - ບໍ, ເຈົ້າຟັງເດີ: "ເງິນຄ່າແຮງງານ ຈ່າຍມື້ວັນເສົາຂອງທຸກໆອາທິດ... ບໍ່ມີສິດປະຕິເສດ... ບໍ່ມີສິດປະວງກວາງງານ..." ເອົານີ້ ປາກການະ. ພຽງແຕ່ເຊັນຊື່ "ເຊມຸຍແອນ" ຊື່ງກໍພໍແລ້ວ. ຂ້ອຍເຊື່ອເຈົ້າ.

ຂ້າພະເຈົ້າຟ້າວເຊັນໃສ່ໂລດ, ໂດຍບໍ່ຕ້ອງການຟັງລາວອ່ານຫມົດ.

- ນີ້ທ່ານ...

ໂດບີ ອ່ານສັນຍານັ້ນຄືນອີກ.

ຂ້າພະເຈົ້າຫາວຄ່ອຍໆ ແລະສຳນຶກເຫັນຄວາມສະບາຍໃຈໄວ້ລ່ວງໜ້າແລ້ວວ່າ ໃນເມື່ອໄດ້ພັກຜ່ອນຫລັງຈາກຮັບປະທານອາຫານຄ່ຳຢ່າງອີ່ມໜຳສຳລານເຊັ່ນນີ້. ແນ່ນອນວ່າ ອີກຄາວໜຶ່ງເຈົ້ານາຍໃໝ່ຂອງຂ້າພະເຈົ້າຈະອວຍພອນໃຫ້ຂ້າພະເຈົ້ານອນຫລັບຝັນດີ ແລ້ວພາຂ້າພະເຈົ້າໄປຫາຫ້ອງນອນ.

- ເອົາລະ, ເຊນຸຍແອນ, ເຮົາໄປເຮັດວຽກກັນເທາະ, - ໂດບີ ເວົ້າຢ່າງແຫ້ງກະແດ້ງ ແລະມ້ວນໜັງສືສັນຍາເຂົ້າກະເປົາ.

- ແມ່ນຫຍັງກັນ? - ຂ້າພະເຈົ້າອ້າປາກຂຶ້ນຊາບງາບ.

- ຊິຈັ່ງໃດອີກລະ, - ໂດບີ ຍັງຕອບຢ່າງເຢັນຍິ່ງກວ່າເກົ່າອີກ - ຂ້ອຍມັກເຮັດວຽກໃນຍາມກາງຄືນ. ເຊີນເຈົ້າໄປບ່ອນລ້ຽງສັດ, ເກືອມັນແລະລ້າງຄອກ. ເສື້ອກັນເປື້ອນຢູ່ສາງຫັ້ນ. ງັບປາກຫັ້ນໄວ້ແດ່, ເຊນຸຍແອນບິນ, ຢ່າຊິພາວຕື່ນ ... ເອີ ... ບໍ່ພໍຄາວກໍລືມສັນຍາແລ້ວ. ຫ້າມສະຫລອກກອກແລະຫ້າມທຳທ່າແປກໃຈແນວນັ້ນ. ດຽວນີ້ ຂ້ອຍຂໍຮ້ອງນຳເຈົ້າສ່ຳນັ້ນກ່ອນ.

ແຂ້ວຂອງຂ້າພະເຈົ້າກັດກັນເຂົ້າຈົນກອກຢາຂາດເຄິ່ງຄາປາກ. ເລື່ອງນີ້ມັນເຮັດໃຫ້ຂ້າພະເຈົ້າມີຄວາມຊື່ນຊົມຍິ່ງ.

ຂ້າພະເຈົ້າຍືນຂຶ້ນ, ເວົ້າອອກມາຢ່າງທຸນທ່ຽງ:

- ທ່ານ, ຂໍປະຕິບັດຄຳສັ່ງ. ທ່ານຈິ່ງພາຂ້າພະເຈົ້າໄປໂລດ?

ຫ້ອງລ້ຽງສັດທີ່ດລອງຕັ້ງຢູ່ໃນສາງ. ບາງທີ ຄອກສັດເຫລົ່ານັ້ນອາດຈະບໍ່ໄດ້ຮັບການບົວລະບັດຂັດສີມາເປັນມື້ໆແລ້ວ, ແລະຂ້າພະເຈົ້າກໍຕ້ອງລົງມືເຮັດວຽກງານທີ່ເປື້ອນເປິ້ນນັ້ນໂລດ.

- ຂ້ອຍຈະແວະມານີ້ອີກໃນຕອນຂ້ອນແຈ້ງ, - ເວົ້າແລ້ວ ໂດບີ ກໍອອກໄປແລະອັດຕູກືບໄວ້.

ຂ້າພະເຈົ້າຫິວນອນເກືອບຕາຍ, ແຕ່ຕ້ອງເຄົາລົບນັບຖືບ່ອນທຳງານໃໝ່.

ດອກໄຟທັງຫລາຍສ່ອງແສງເຂົ້າໃສ່ຄອກສັດຕ່າງໆທີ່ຕິດນ້ຳເບີຄັກແນ່, ແລະຂ້າພະເຈົ້າກໍທຳຄວາມລຶ້ງເຄີຍກັບຝູງສັດທີ່ໜ້າຈັບໃຈເຫລົ່ານັ້ນຢ່າງໄວວາ. ກ້າຫານກັບອຸທິຍານຂອງ

"ສາດສະດາຈານງູ" ແລ້ວທີ່ນີ້ມັນປານສະຫວັນແຫ່ງຫນຶ່ງ, ມັນແມ່ນບ່ອນພັກອາໄສຂອງພວກເທວະດາທັງຫລາຍ.

ຂ້າພະເຈົ້າເຮັດວຽກຢ່າງເພີນ ແລະບໍ່ຮູ້ເມື່ອເລີຍວ່າ ມື້ໃຫມ່ຮຸ່ງແຈ້ງຂຶ້ນແຕ່ຫວ່າງໃດ.

- ພັກຜ່ອນສາ, - ໃນຂະນະທີ່ຍ່າງເຂົ້າມາໃນເຮືອນລັ່ງສັດ, ໂດບິເວົ້າກ້ອງກັງວານຂຶ້ນ. - ແລ້ວຂ້ອຍຈະບອກໃຫ້ເຈົ້າຮູ້ຈັກວິທີເກືອມັນ. - ເພິ່ນແນະນຳໃຫ້ຂ້າພະເຈົ້າຮູ້ຈັກວິທີບົວລະບັດສັດທີດຂອງເຫລົ່ານັ້ນ, ກອກອາຫານແລະນ້ຳລົງໃສ່ຮາງ ຊ່ວຍຂ້າພະເຈົ້າ.

- ເຊມຸຍແອນ, ເຈົ້າໄປນອນໄດ້ແລ້ວ, - ໂດບີ ເວົ້າ, ເບິ່ງຊົງເພິ່ນຄົງຈະພໍໃຈກັບວຽກທີ່ຂ້າພະເຈົ້າເຮັດນັ້ນ.

- ເຈົ້າທ່ານ ...

ພວກເຮົາອອກຈາກສາງໄປ. ຕໍ່ຫນ້າຂອງຂ້າພະເຈົ້າແມ່ນຄະລືຫາດນ້ອຍງາມໆຫລັງຫນຶ່ງພ້ອມດ້ວຍເດີ່ນທີ່ແສນສະອາດສະອ້າງແລະມີຮົ້ວເຫລັກອ້ອມໄວ້ຄັກແນ່, ເຮືອນຫລັງນີ້ຕັ້ງຢູ່ເທິງຈອມພູ ເຊິ່ງປະກົດວ່າເປັນພູຫນ່ວຍນີ້ຂ້າພະເຈົ້າກໍເຄີຍຮູ້ມັນມາກ່ອນແລ້ວ.

ຂ້າພະເຈົ້າຍ່າງໄປໃກ້ໆກັບດົ້ວຮົ້ວເຫລັກ. ຢູ່ເບື້ອງລຸ່ມໄກໆພຸ້ນ, ຜ່ານຂົງເຂດເຫວເລິກທີ່ມີຫີນຫນາມຫນໍ່, ຢູ່ໃຕ້ແສງອາລຸນຍາມເຊົ້ານັ້ນແມ່ນຕົວເມືອງທີ່ສວຍສົດງົດງາມ. ນັ້ນຄືຕົວເມືອງ ແອຊູໂອເຣີ, ບ້ານເກີດເມືອງນອນຂອງຂ້າພະເຈົ້າ.

## IV

ຄະລືຫາດຂອງ ໂດບີ ຄືຊິແມ່ນຫາກໍ່ສ້າງຂຶ້ນມາຢູ່ເທິງດິນເປົ່າຫວ່າງຕອນຫນຶ່ງເທິງຈອມດອຍກຸຫລາບຄູ່. ນອກຈາກເຈົ້ານາຍ ແລະຂ້າພະເຈົ້າແລ້ວ, ໃນເຮືອນຫລັງນີ້ຍັງມີຄົນໃຊ້ຊະລາຜູ້ຫນຶ່ງຊື່ວ່າ ມິກລີ. ເຂົາເປັນຄົນບໍ່ມັກປາກ, ປຸງແຕ່ງອາຫານເອື້ອງຕ່າງໆໄດ້ເກັ່ງຫລາຍ. ລຸງນີ້ແຕ່ງອາຫານແຊບຢ່າງຫາບ່ອນຕິບໍ່ໄດ້, ແລະຂ້າພະເຈົ້າກໍເຄີຍລໍກ້າຄາບເຂົ້າທ່ຽງຢູ່ເລື້ອຍໆເພື່ອຈະໄດ້ສັງເວີຍເຊີຍຊົມນຳສີລະປະແຫ່ງການປຸງແຕ່ງອັນຍອດຍ້ຽມ ຂອງລຸງ. ພິເສດ ລຸງນີ້ຍັງຮູ້ຈັກປຸງແຕ່ງຂອງຫວານອີກ. ຂອງຫວານຊຸດໃນຫມາກກໍ່ຕົ້ມກັບກະແລັມຂອງລຸງນັ້ນ ຈັ່ງແມ່ນວິເສດອີ່ຫລີ.

ຢູ່ຊັ້ນເທິງແມ່ນຫ້ອງເຮັດວຽກຂອງ ໂດບີ, ບ່ອນເຊິ່ງມີພຽງເພິ່ນຜູ້ດຽວດຳລົງຊີວິດຢູ່ທັງເວັນທັງຄືນ. ຂ້າພະເຈົ້າມີຫນ້າທີ່ນຳເອົາສັດທົດລອງທີ່ ໂດບີ ຕ້ອງການນັ້ນຂຶ້ນເມືອຍັງຫ້ອງທຳອິດຂອງຊັ້ນເທິງ. ເພິ່ນເຮັດຫຍັງກັບສັດເຫລົ່ານັ້ນແດ່, ຂ້າພະເຈົ້າບໍ່ຈັກ. ຫລັງຈາກນັ້ນ, ເມື່ອໄດ້ງົບສຽງກະດິງເອີ້ນ, ຂ້າພະເຈົ້າ ກໍກັບຂຶ້ນເມືອຊັ້ນເທິງອີກ, ຊັບຊ້ອນຄອກສັດຕ່າງໆເຫລົ່ານັ້ນ, ແລະນຳເອົາມັນລົງມາໄວ້ໃນສາງ. ຢູ່ແຫ່ງນີ້ ຂ້າພະເຈົ້າບໍ່ອຶດແຕ່ວຽກເຮັດ ຈະຕ້ອງເກືອສັດຕາມຕາຕະລາງເວລາ, ທຸກເຊົ້າແລະແລງຕ້ອງເອົາກະຕ່າຍສອງສາມໂຕມາຕິດນ້ຳຫນັກແລະລາຍງານຜົນຂອງມັນໃຫ້ໂດບີ. ຍ້ອນວ່າ ລຸງ ມີກລີ ບໍ່ມັກປາກ, ສ່ວນ ໂດບີ ນັ້ນຂ້າພະເຈົ້າກໍໄດ້ພົບແຕ່ຍາມທີ່ເພິ່ນຕ້ອງການ, ດ້ວຍເຫດນັ້ນ ຂ້າພະເຈົາຈຶ່ງຜູກຄວາມເປັນເພື່ອນກັບກົບ, ຫມາພານນ້ອຍຕົວເລີດລ້ຳແຫ່ງເຂດຊົດລັງ. ບັກກົບສະຫລາດທີ່ສຸດ, ມັນແລ່ນຕາມຂ້າພະເຈົ້າໄປຮອດຕໍ່ຫນ້າສາງແລ້ວກໍຢຸດຢູ່ຫັ້ນ, ເພາະມັນຖືວ່າກ້າເຂົ້າໄປຫັ້ນແມ່ນເປັນການລົດຄຸນຄ່າຂອງຕົນລົງ. ພວກແມວເຖິກທີ່ຖືກຂັງໄວ້ໃນຄອກຫນຶ່ງຕ່າງຫາກນັ້ນແມ່ນຖືກມັນດູຫມິ່ນເປັນພິເສດ. ຈະຕ້ອງເວົ້າວ່າພວກແມວເຖິກແລະແມວແມ່ເຫລົ່ານັ້ນແມ່ນພວກສັດທີ່ຂີ້ແອ່ວທີ່ສຸດໃນຝູງສັດທົດລອງ. ມີແຕ່ເວລາໃດ ເຂົາເຈົ້າເອົາຊີ້ນແລະນ້ຳນົມສົດໆໄປໃຫ້ມັນເທົ່ານັ້ນ ພວກມັນຈຶ່ງຈະເຊົາຮ້ອງ. ທີ່ຫ້ອງລ້ຽງສັດ, ບາງເທື່ອໃນຂະນະທີ່ສັດພວກອື່ນພວມຖືກຄວາມຫງ່ວມເຫງົາອັນໃຫຍ່ຫລວງບຸກໂຈມຕີ, ແຕ່ພວກມັນກໍຍັງຮ້ອງແມວ, ແມວຂຶ້ນອຶກກະທຶກ, ບາງທີພວກມັນອາດຮ້ອງດ່າສາບແຊ່ງເປັນພາສາແມວ, ຈົນເກີງຂັ້ນວ່າ ໂດບີ ຕ້ອງອອກຄຳສັ່ງ:

-ເຊມຸຍແອນ, ເຈົ້າເອົາແມວພວກນັ້ນອອກມາຫລິ້ນຢູ່ນອກແດ່.

ເຂົາເຈົ້າຂັງຫມາບັກກົບໄວ້ໃນເຮືອນຄົວ, ສ່ວນຂ້າພະເຈົ້າກໍໃຊ້ສາຍໂສ້ນ້ອຍຈູງແມວເທື່ອລະສີ່ໂຕອອກມາກາງແຈ້ງ, ຕິດຕາມເບິ່ງບໍ່ໃຫ້ມັນຫລຸດອອກຈາກບ້ວງໄປໄດ້.

ລະດູຫນາວຫລອຍເຂົ້າມາແຕ່ຫວ່າງໃດບຸ. ຂ້າພະເຈົ້າເຮັດວຽກທຳງານໄປດ້ວຍຄວາມຫຸ່ນຫ່ຽງໃຈ, ກິນເຂົ້າຫວານຈານແກງແຊບແລະອາດຈະເວົ້າໄດ້ວ່າຂ້າພະເຈົ້າມີຄວາມພໍໃຈກັບຫນ້າທີ່ວຽກງານທີ່ບໍ່ມີຫຍັງຈະສັບສົນພໍເທົ່າໃດນີ້, ນອກຈາກນັ້ນ, ແຕ່ລະອາທິດ ຂ້າພະເຈົ້າຍັງໄດ້ຮັບເງິນເດືອນຢູ່ເປັນປະຈຳແລະມ້ຽນມັດເງິນໄວ້ໃນໂຕະທີ່ຮອງນອນນັ້ນ.

ໃນມື້ດຽວກັນກັບມື້ເບີກເງິນເດືອນນັ້ນໂລດ, ໂດບີ ກໍຈະເອົາສະບູມາຖູໃສ່ຫນ້າຂອງຂ້າພະເຈົ້າແລະເພິ່ນແຖຫນວດໄດ້ຢ່າງແນບນຽນທີ່ສຸດ. ບໍ່ເຄີຍເຮັດຫນ້າຂອງຂ້າພະເຈົ້າບາດຈັກເທື່ອ. ຫນ້າເສຍດາຍແຕ່ວ່າ, ຂ້າພະເຈົ້າບໍ່ສາມາດຈະໄດ້ລ່ຳແຍງຫມາກຜົນແຫ່ງການທຳງານຂອງຊ່າງຕັດຜົມຂອງຂ້າພະເຈົ້າເທົ່ານັ້ນ, ເພາະວ່າທົ່ວທັງຄະລີຫາດຫລັງນີ້ບໍ່ມີແວ່ນພໍບ່ອງເລີຍ. ມີບາງຄັ້ງ ຂ້າພະເຈົ້າກໍຢາກຈະຖາມເຈົ້ານາຍເບິ່ງວ່າ, ເພິ່ນຕັ້ງໃຈເລືອກໃຊ້ແວ່ນຫລືເປັນພຽງແຕ່ເລື່ອງບັງເອີນຢ່າງຫນຶ່ງເທົ່ານັ້ນ, ແຕ່ສັນຊາດຍານຍ່ອມເຕືອນໃຫ້ຂ້າພະເຈົ້າຮູ້ວ່າ ເພິ່ນຈະບໍ່ມັກຄຳຖາມແບບນີ້. ອີກຢ່າງຫນຶ່ງນິໃສອັນພິດສະດານດັ່ງກ່າວຂອງ ໂດບີ ຈະກ່ຽວພັນຫຍັງເຖິງຂ້າພະເຈົ້າລະ? ເພິ່ນປະພຶດຕົວຕໍ່ຂ້າພະເຈົ້າດີສົມຄວນ. ແຕ່ແລ້ວ ຂ້າພະເຈົ້າກໍບໍ່ມີໂອກາດໄດ້ແນມເຫັນສຳນຽງສຽງເວົ້າອັນນຸ່ມນວນແລະຮອຍຍິ້ມອັນອົບອຸ່ນຂອງ ເພິ່ນດັ່ງຄືນທີ່ຫາກໍຮູ້ຈັກກັນນັ້ນ. ເວົ້າທົ່ວໄປແລ້ວແມ່ນເພິ່ນບໍ່ຄ່ອຍຈະໂອ້ລົມກັບຂ້າພະເຈົ້າ.

ສ່ວນຂ້າພະເຈົ້າ, ຍ້ອນຮູ້ບຸນຄຸນທີ່ເພິ່ນໄດ້ຊ່ວຍຊູ້ກູ້ຊີວິດຂອງຕົນນັ້ນເປັນຍິ່ງ, ດັ່ງນັ້ນຍາມໃດກໍພະຍາຍາມທຳໃຫ້ເພິ່ນພໍໃຈ, ຍິ່ງກວ່ານັ້ນກໍຍັງເປັນຫ່ວງເປັນໃຍເຖິງສຸຂະພາບຂອງເພິ່ນອີກ. ຂ້າພະເຈົ້າບໍ່ພໍໃຈນຳອາການໄອຊຳເຮື້ອຂອງເພິ່ນນັ້ນເລີຍ.

ແຕ່ເຖິງຈະຢູ່ນະທີ່ນີ້, ຂ້າພະເຈົ້າກໍຄົງເປັນຄົນໂດດດ່ຽວປ່ຽວພອຍຢູ່ນັ້ນລະ ການທີ່ຖືກກັກຂັງຢູ່ແຕ່ໃນບໍລິເວນເຮືອນຫລັງນັ້ນ ໄດ້ເລີ່ມສ້າງຄວາມເບື່ອຫນ່າຍໃຫ້ແກ່ຂ້າພະເຈົ້າ, ພິເສດແມ່ນເລີ່ມແຕ່ເຊົ້າລະດູຫນາວມື້ນັ້ນ, ເມື່ອຂ້າພະເຈົ້າໄປຢືນຢູ່ຂ້າງດົ້ວຮົ້ວເຫລັກ ບ່ອນເຊິ່ງເບິ່ງລົງສູ່ປາກເຫວນັ້ນເປັນຕົ້ນມາ. ດວງອາທິດໃນລະດູຫນາວໄດ້ສ່ອງແສງແດດລົງໃສ່ບັນດາຫລັງຄາເຮືອນທີ່ຕົວເມືອງແອລຊູໂອເຣີຢ່າງນຸ່ມນວນ. ຂ້າພະເຈົ້າໄຝ່ຝັນຢາກຈະລົງພູໄປ, ຢາກຈະໄປທ່ຽວຫລິ້ນຢູ່ຕາມບັນດາກະຫນົນຫົນທາງອັນມືດງຽບ, ຢາກຈະແວະເຂົ້າຮ້ານອາຫານ "ເຈົ້າສະຫມຸດ" ຫລື "ລາຊາເສືອ" ຢາກຈະຜິງໄຟຢູ່ຂ້າງເຕົາແລະໄດ້ຟັງຂ່າວຄາວຕ່າງໆກ່ຽວກັບ ແອລຊູໂອເຣີ. ລຸງມີກຸດຂອງຂ້າພະເຈົ້າຍັງຈະສາທະຍາຍອະພິປາຍບັນຫາດ້ວຍສຳນວນປັດຊະຍາຢູ່ຄືເກົ່າບໍ່? ພໍ່ຂອງຂ້າພະເຈົ້າເດຢູ່ກິນຢ່າງໃດ? ແອເດີ ຜົມແສດນັ້ນພວມເຮັດຫຍັງຢູ່? ສ່ວນຫມໍ ພລິດນັ້ນບາງທີອາດຈະນັບມື້ນັບຕຸ້ຍເບະຕຸ້ຍເບັ່ງຂຶ້ນ...

ຂ້າພະເຈົ້າສຳນຶກເຫັນບັນດາຮູບພາບຂອງກະຫນົນຫົນທາງຕ່າງໆແຫ່ງຕົວເມືອງ ແອລຊູ

ໂອເຣີພໍມົວໆຢູ່ໃນສະຫມອງຂອງຕົນ. ພຸ້ນ, ຫລັງຄາໂບດ, ບ່ອນເຊິ່ງພະສັງຄະປະທານ ອີແອເຣມີອາ ຄຸ້ມຄອງຢູ່ນັ້ນ ພຸ່ງພົ້ນເດັ່ນຂຶ້ນ. ສ່ວນຢູ່ເບື້ອງຫລັງພູເຂົາພຸ້ນ ແນ່ນອນວ່າ ມັນຕ້ອງແມ່ນເຮືອນທີ່ແສນສະຫນິດຄຸ້ນເຄີຍຂອງຂ້າພະເຈົ້ານັ້ນເອງ. ບາງທີສາວນ້ອຍ ເມຣີພິນສີທອງນັ້ນຄົງໃຫຍ່ຂຶ້ນຫລາຍແລ້ວ... ສ່ວນເອດີວິນເດ? ພໍແຕ່ຄຶດເຫັນ ເອດີແອບຫນຶ່ງເທົ່ານັ້ນປະກົດວ່ານາງໄດ້ມາຢືນຈ້ອງຢູ່ຕໍ່ຫນ້າຂອງຂ້າພະເຈົ້າແລ້ວ. ຫມາກຫົວໃຈທີ່ຫ້ອຍຢູ່ໃນຊວງເອິກຂອງຂ້າພະເຈົ້າເຕັ້ນຕຶກໆຂຶ້ນມາປານກັບນົກຂີ້ຫມິ້ນເຕັ້ນຢູ່ໃນຄຸ້ມເອົາໂລດ ...

ຊີວິດທີ່ເຕັມໄປດ້ວຍການຊຸດເຊພະເນຈອນໃນເມື່ອກ່ອນນີ້ ມັນໄດ້ສອນໃຫ້ຂ້າພະເຈົ້າຕ້ອງສັງເກດສະພາບແວດລ້ອມຢູ່ສະເຫມີແລະພາຍໃນເຮືອນຂອງ ໂດບີ ກໍເຊັ່ນກັນ.

ຂ້າພະເຈົ້າຄ່ອຍໆລຶ້ງເຄີຍກັບຄວາມເປັນໄປຂອງຄະລືຫາດປະຫລາດຫລັງນີ້. ເຄື່ອງຈັກສອງເຄື່ອງທີ່ແລ່ນດ້ວຍກຳລັງແຮງຂອງກະແສລົມນັ້ນ ໄດ້ສົ່ງພະລັງໄຟຟ້າໃຫ້ມັນສູບນ້ຳພຸ່ງຂຶ້ນມາຈາກພື້ນສ້າງແລະເຮັດໃຫ້ບັນດາເຄື່ອງກົນຈັກທຸກໆຊະນິດແລ່ນທຶດໆຢູ່ໃນຫ້ອງຕ່າງໆ ຂອງ ໂດບີ. ຄະລືຫາດຫລັງນີ້ ໄດ້ຮັບອາຍອຸ່ນດ້ວຍກຳລັງໄຟຟ້າ, ແລະມີເທື່ອຫນຶ່ງ ໂດບີ ໄດ້ອວດອ້າງວ່າເຄື່ອງໄຟຟ້າທັງຫມົດຂອງເພິ່ນລ້ວນແຕ່ອັດຕະໂນມັດ. ເມື່ອລະບົບຫມໍ້ໄຟຕ່າງໆ ກົກສາກໄຟເຂົ້າໄປຢ່າງພຽງພໍແລ້ວບັນດາເຄື່ອງຈັກ ທີ່ແລ່ນດ້ວຍກຳລັງແຮງຂອງກະແສລົມນັ້ນກໍຫັນມາເຮັດຫນ້າທີ່ສູບແລະສົ່ງນ້ຳ.

ບາງຄັ້ງຄາວ ໃນຂະນະທີ່ພວມສັງເກດເບິ່ງພວກຫນູໂລພາພວມກິນເສດແກງມັນຝະລັ່ງຂອງລູງ ມິກລີ ຢູ່ນັ້ນ, ຂ້າພະເຈົ້າເຄີຍໄດ້ຄົ້ນຄຶດກ່ຽວກັບ ໂດບີ ເພາະຢູ່ໃນຫນັງສືສັນຍາໃສຊິໄດ້ຫ້າມບໍ່ໃຫ້ຄົ້ນຄຶດເຖິງເລື່ອງເຈົ້ານາຍ?

ຂ້າພະເຈົ້າມີຫຍັງພົວພັນກັບວຽກງານຂອງ ໂດບີ ແດ່ບໍ? ບໍ່ມີຫຍັງຈະຕ້ອງສົງໄສອີກແລ້ວວ່າ, ໂດບີ ຄືນັກຈຸລະຊີວະວິທະຍາຜູ້ຫນຶ່ງ. ເຊັ່ນມື້ວານນີ້ ເພິ່ນແລະຂ້າພະເຈົ້າໄດ້ຮ່ວມກັນກະກຽມທາດປູກເຊື້ອຫມົດຕອນຄ່ຳ ເພື່ອຈະປູກແມ່ພະຍາດ. ມິກລີໄດ້ຕົ້ມແກງເສັ້ນຊິ້ນງົວຊຸ້ນໆ ແລະຂ້າພະເຈົ້າກໍຕອງມັນຜ່ານລະບົບເຄື່ອງກັ່ນຕອງດ້ວຍຄວາມລະມັດລະວັງທີ່ສຸດ, ແລ້ວຂ້າເຊື້ອດ້ວຍເຕົາອົບທີ່ຕັ້ງຢູ່ຫ້ອງທຳອິດຂອງຊັ້ນເທິງ. ວຽກງານທັງຫມົດເຫລົ່ານັ້ນປະກົດວ່າບໍ່ມີຫຍັງເປັນເລື່ອງພິເສດ. ໃນສະຖານທີ່ຂອງ "ສາດສະດາຈານງູ" ພຸ້ນ, ນາງ ລີເຢີ

ກໍທຳການຄົ້ນຫາແບບນີ້ເຊັ່ນກັນ ແຕ່ເປັນຫຍັງອີກ ໂດບີ ຜູ້ນີ້ຈຶ່ງມີແຕ່ນັ່ງເຮັດວຽກຢູ່ຜູ້ດຽວ ແລະລ້ຽງສັດໄວ້ເຮັດຫຍັງ ?

ຄວາມຄິດໄຕ່ຕອງນີ້ໄດ້ເຂົ້າມາສິງຢູ່ໃນໃຈຂ້າພະເຈົ້າດ້ວຍຕົວມັນເອງ. ບາງທີ ໂດບີ ຄົງເປັນນັກຄິດປະດິດຜູ້ໜຶ່ງ. ຢູ່ ຊານຟຣານຊິສໂກ, ຂ້າພະເຈົ້າເຄີຍໄດ້ເບິ່ງຮູບເງົາເລື່ອງໜຶ່ງ: "ຄົນບໍ່ຫ່ວງໂລກຜູ້ລຶກລັບ", ແລະເລື່ອງນີ້ມັນໄດ້ສ້າງຄວາມປະທັບໃຈຢ່າງແຮງໃຫ້ແກ່ຂ້າພະເຈົ້າ. ຄົນບໍ່ຫ່ວງໂລກຜູ້ນັ້ນຢາກຈະຄົ້ນພົບວິທີທຳລາຍປະລາມະນູ ເພື່ອເດີນເລິກເຂົ້າໃນການຊອກຮູ້ເຄັດລັບໃນການປະດິດສ້າງວັດຖຸ. ໃນຕອນທ້າຍຂອງຮູບເງົານັ້ນ, ຫ້ອງທົດລອງຂອງສາດສະດາຈານບໍ່ຫ່ວງໂລກຜູ້ນັ້ນໄດ້ລະເບີດຂຶ້ນເທິງຟ້າ, ສ່ວນລູກສາວຜູ້ເລີດເດັ່ນຂອງລາວກໍຂີ່ເຄື່ອງບິນໄປຊ່ວຍເອົາພໍ່, ຕໍ່ມານາງໂຊກດີທີ່ໄດ້ແຕ່ງດອງກັບພະນັກງານໃນຫ້ອງທົດລອງຜູ້ໜຶ່ງ, ຕໍ່ມາຜົວຂອງນາງກໍຄືລູກຊາຍຂອງເສດຖີຄົນໜຶ່ງ. ສ່ວນ ໂດບີ? ແມ່ນບໍ່ວ່າເພິ່ນເປັນພຽງແຕ່ຄົນພິດສະດານຜູ້ໜຶ່ງເທົ່ານັ້ນ ?

ມື້ໜຶ່ງ, ໃນລະຫວ່າງກິນເຂົ້າທ່ຽງ, ມິກລີໄດ້ເອົາເປັດອົບຫມາກໂປມຂຶ້ນເມືອໃຫ້ ໂດບີ. ຍ້ອນແນວໃດບໍ່ ຂ້າພະເຈົ້າຈຶ່ງເກີດມີຄວາມສົນໃຈກ່ຽວກັບເລື່ອງທີ່ວ່ານີ້ ມິກລີຫາເອົາຂອງເຫລົ່ານີ້ມາແຕ່ໃສ. ເວົ້າທົ່ວໄປແລ້ວ ເພາະເຫດໃດ ໂດບີ ຈຶ່ງບໍ່ຂາດເຂີນຫຍັງຈັກຢ່າງ? ເປັນໄປໄດ້ບໍ່ວ່າລາວໄດ້ປະດິດວິທີຜະລິດໄຂມັນນົມ, ຫມາກໄມ້ສົດ, ເປັດໂດຕຸ້ຍອົ້ນຕົ້ນແທ້ໆຂອງເຂດ ແອລູໂອເຣີ ນັ້ນຂຶ້ນມາຈາກຫ້ອງທົດລອງໄດ້ດ້ວຍກຳມະວິທີເຄມີສາດ?

ແຕ່ການເປັນໄປດັ່ງກ່າວນັ້ນ ມັນແສນຈະທຳມະດາທີ່ສຸດ.

ມີເທື່ອໜຶ່ງເປັນຍາມເຊົ້າ, ໃນຂະນະທີ່ຂ້າພະເຈົ້າພວມນອນຫລັບນອນຝັນຢູ່ພາຍຫລັງການທຳງານທີ່ຫ້ອງລ້ຽງສັດຕະຫລອດຄືນນັ້ນ. ສຽງຈັກລົດໂອໂຕທີ່ດັງບົ້ນໆຢູ່ຢ່າງສະໝ່ຳສະເໝີນັ້ນ ໄດ້ປຸກຂ້າພະເຈົ້າໃຫ້ຕື່ນຂຶ້ນມາ. ຂ້າພະເຈົ້າຍ່ອງໄປສ່ອງເບິ່ງທີ່ປ່ອງຢ້ຽມດ້ວຍຄວາມລະມັດລະວັງແລະແນມເຫັນຊາຍຫນຸ່ມຜົມແດງຄົນໜຶ່ງ, ຈ່ອຍໂຄ່ງໂຍ້ງໄດ້ນຳເອົາຫໍ່ຂອງໃຫຍ່ໆ, ຫີບແລະແກັດ, ກະກຸງຕ່າງໆມາທີ່ປະຕູຮົ້ວເຫລັກຂອງຄະລືຫາດ, ເຂົາວາງຂອງເຫລົ່ານັ້ນໄວ້ຂ້າງປະຕູແລ້ວກໍຫນີໄປ. ຫລັງຈາກນັ້ນປະຕູກໍໄຂອອກ. ມິກລີ ໄດ້ຂັບລົດຂົນເຄື່ອງທີ່ແລ່ນດ້ວຍໄຟຟ້າໄປຍັງກອງເຄື່ອງເຫລົ່ານັ້ນ, ຂົນຂຶ້ນລົດຢ່າງໄວວາແລ້ວລົດກໍແລ່ນ

ລີບເຂົ້າໄປທາງດ້ານຫລັງຂອງແຈເຮືອນ. ບາງທີລາວອາດຈະບັນທຸກເຄື່ອງເຂົ້າເຮືອນຄົວ. ຂ້າພະເຈົ້າຊຸກປະຕູອອກ. ແຕ່ຫ້ອງຂອງຂ້າພະເຈົ້າຖືກຂັບກະແຈແຫນ້ນໆຢູ່ທາງນອກ. ເລື່ອງນີ້ເຮັດໃຫ້ຂ້າພະເຈົ້າບໍ່ພໍໃຈ ແລະຕ້ອງໄດ້ລະມັດລະວັງຕົວສຸດຂີດ. ຂ້າພະເຈົ້າທຸບບານປະຕູດັງເຕັງໆ. ມິກລີ ບໍ່ພ້າວມາໄຂໂລດ, ລາວຈົ່ມພຸມໆຢູ່ວ່າບໍ່ຮູ້ວ່າຂ້າພະເຈົ້າກັບມາແຕ່ຫ້ອງລັງສັດແລ້ວ.

ໃນມື້ຕໍ່ໆມາ, ຂ້າພະເຈົ້າກໍສັງເກດເຫັນວ່າທຸກໆເຊົ້າໃດ ມິກລີ ກໍລີງພູໄປຍັງຕົວເມືອງ ແລ້ວກັບມາກ່ອນທີ່ຂ້າພະເຈົ້າຈະຕື່ນນອນ.

ປະກົດວ່າບໍ່ມີຫຍັງເກີດຂຶ້ນໃນຊີວິດອັນປົກກະຕິຂອງພວກເຮົານັ້ນເລີຍ. ມີເທື່ອຫນຶ່ງ ໂດບີ ໄດ້ມາຈອບຂ້າພະເຈົ້າຊື່ງພວມແນມຜ່ານດົວຮົ້ວເຫລັກໄປທາງ ແອຊູໂອເຣີ ຢູ່ ເພິ່ນເວົ້າຂຶ້ນວ່າ:

- ອີກເຄິ່ງປີກໍຈະຫມົດກຳນົດສັນຍາ. ເຊມຸຍແອນ, ບາດນັ້ນເຈົ້າຢາກໄປໃສກໍໄດ້ຕາມໃຈຊອບ.

- ທ່ານ, ເວົ້າແທ້ແລ້ວ ບາງຄັ້ງຄາວຂ້າພະເຈົ້າກໍຮູ້ສຶກຫງ່ອມເຫງົາ, - ຂ້າພະເຈົ້າສາລະພາບ.

- ເອີ, ຂ້ອຍເຂົ້າໃຈ, - ໂດບີຕອບ. - ແຕ່ເງື່ອນໄຂທີ່ໄດ້ລະບຸໄວ້ມັນເປັນຈັ່ງຊັ້ນເດ ... ແຕ່, ຂ້ອຍເອງກໍເມື່ອຍນຳການດຳລົງຊີວິດແບບລີ້ຊ່ອນປ່ອນຕົວແບບນີ້ມາຫລາຍແລ້ວ. ເຊມຸຍແອນເອີຍມື້ອື່ນ ພວກເຮົາໄປທ່ຽວຫລິ້ນເທິງພູກັນເທາະ? ພູນັ້ນງາມຫລາຍ, ແມ່ນບໍ່?

ເປັນອັນວ່າພວກເຮົາໄດ້ມີໂອກາດຍ່າງຂາຂ້າມປະຕູຮົ້ວເຫລັກອອກໄປ.

ຫລັງຈາກຍ່າງໄປໄດ້ປະມານຫນຶ່ງຮ້ອຍກ້າວແລະມາຮອດປາກເຫວຢູ່ທາງດ້ານຫລັງ ຂອງເດີ່ນໂລ່ງແປນນັ້ນແລ້ວ, ໂດບີ ກໍເວົ້າຂຶ້ນວ່າ:

- ເຊມູຍແອນ, ເຈົ້າເປັນຜູ້ພາທາງເດີ. ຂ້ອຍບໍ່ມັກຝັ່ງທະເລ...ຕົວເມືອງນ້ອຍໆຄືແອຊູໂອເຣີ ນີ້ ຢູ່ໃນປະເທດຂອງພວກເຮົາມີຫລາຍທີ່ສຸດ, ສ່ວນພູດອຍແລ້ວ...ເອີ...ນີ ເຊມູຍແອນ, ຄືຈັ່ງວ່າ ເຈົ້າເກີດຢູ່ແຖບໃກ້ຄຽງນີ້ໃດເນາະ...

- ຈ້າວ, ທ່ານ.

- ບາງທີ ເຈົ້າຄືຊິຮູ້ວ່າທາງນ້ອຍເສັ້ນນີ້ເນັ່ງໄປໃສ່ແຫ່ງໃດ?

ຈາກລະຫວ່າງກາງຂອງຕົ້ນຫມາກຫມັ້ນຫນາມຂຶ້ນເມືອເທິງນັ້ນ ມີທາງນ້ອຍຈັນສາຍຫນຶ່ງເຊິ່ງຂ້າພະເຈົ້າຮູ້ຈັກດີຕັ້ງແຕ່ຄາວຍັງບໍ່ທັນສ້າງຄະລີຫາດຫນີຂຶ້ນມາພຸ້ນ.

- ນີ້ຄື ດອຍຄຳ, - ຂ້າພະເຈົ້າເວົ້າດ້ວຍຄວາມລະມັດລະວັງ ເພື່ອບໍ່ໃຫ້ ໂດບີ ສາມາດຢັ່ງຮູ້ເຈດຕະນາຂອງຂ້າພະເຈົ້າທີ່ພວມຢາກຈະຊອກຮູ້ເພິ່ນໃຫ້ລະອຽດກວ່າເກົ່າ. - ຢູ່ເບື້ອງຫລັງຂອງດອຍນີ້ມີທາງເກົ່າເສັ້ນຫນຶ່ງທີ່ເນັ່ງໄປຫາບໍ່ຕ່າງໆ.

ໂດບີ ເວົ້າຂຶ້ນວ່າ:

- ນີ້ ເຊມຸຍແອນ, ກ້າບໍ່ເຫລົ່ານັ້ນບໍ່ໄກເກີນຄວນແລ້ວ ເຈົ້າລອງພາຂ້ອຍໄປແດ່. ຂ້ອຍຄຶດວ່າ, ຢູ່ບ່ອນຫັ້ນຈະໄດ້ເຫັນທິວທັດອັນກວ້າງຂວາງກວ່າ...

- ແມ່ນແລ້ວ, ທ່ານ, - ຂ້າພະເຈົ້າເຫັນດີແລະແວອອກມາທາງປູຫີນ.

ຈາກຈອມພູດອຍຄຳນັ້ນ ພວກເຮົາທອດສາຍຕາຊົມທິວທັດມະຫາສະຫມຸດທີ່ພວມພາດຕົ້ນຕີພອງຢູ່ແລະຊົມຝັ່ງທະເລອັນສວຍງາມດ້ວຍຄື້ນຟອງທີ່ຊ່ວງເສັງກັນຕີບເຂົ້າໃສ່ຝັ່ງແລະສະຟອດຂາວສວະອອກມານັ້ນ. ໂບນພາກຸຫລາບຄູ່ພົ້ນຂຶ້ນມາຢູ່ເບື້ອງລຸ່ມໄກໆພຸ້ນ ແລະໃນຂະນະນີ້ເບິ່ງແລ້ວມັນເປັນພຽງຈຸດສີຂີ້ເທົ່າຈຸດຫນຶ່ງເທົ່ານັ້ນ. ບັນດາກຸ່ມເມກຫນາຄ່ອຍໆເລື່ອນໄຫລໄປເທິງຫນ້າມະຫາສະຫມຸດແລະພາໃຫ້ມີເງົາແບບເລືອນລາງພິດສະດານເກີດຂຶ້ນ. ບັນດາຍອດແປກແຄມເຂົາຊາກບີ ແລະປ່າ ປາຕຣີກນັ້ນໄດ້ກາຍເປັນພຽງເສັ້ນສີຂຽວຄົ້ມເນັ່ງຕັດໄປສູ່ຝັ່ງທະເລ. ດິນຟ້າອາກາດລ່ວງເລີຍມາຮອດທ້າຍລະດູຫນາວແລ້ວ, ດັ່ງນັ້ນ ກະແສລົມຫນາວພ້ອມດ້ວຍແສງແດດອັນອົບອຸ່ນ ໄດ້ເຮັດໃຫ້ຮ່າງກາຍຂອງເຮົາມີຄວາມສະບາຍຂຶ້ນ. ທັດສະນີຍະພາບທີ່ເປີຍແປອອກມາຕໍ່ຫນ້າຂ້າພະເຈົ້ານັ້ນຊ່າງສວຍງາມສະດຸດຕາຍິ່ງ! ຄວາມມິດງຽບໃນແຫ່ງນີ້ກໍຊວນໃຫ້ຝັນໄຝ່ເຫລືອທີ່ຈະພັນລະນາ! ມີພຽງພຸ່ມໄມ້ແຫ້ງຕ່າງໆເທົ່ານັ້ນທີ່ຄອນໆກໍສົ່ງສຽງຄ່ອຍໆດັງຊູ່ສ່າຂຶ້ນມາຍ້ອນກະແສລົມອ່ອນ.

ໂດບີ ເອົາມືໄຂ່ວຫລັງແລ້ວຍ່າງເປີຍອາລົມຢູ່ເທິງຍອດເຂົາ. ຄອນໆເພິ່ນກໍໃຊ້ຕີນເຂ່ຍຂີ້ຫີນກ້ອນໃດກ້ອນຫນຶ່ງທີ່ຢູ່ແຄມ ແລ້ວສະດັບຟັງສຽງດັງທີ່ເກີດຂຶ້ນໃນລະຫວ່າງທີ່ມັນກິ້ງລົງມາລຸ່ມ. ປະກົດວ່າເລື່ອງນີ້ພາໃຫ້ເພິ່ນເກີດຄວາມເພີດເພີນຂຶ້ນ. ເພິ່ນພວມຄົ້ນຄິດບັນຫາໃດບັນ

ຫາຫນຶ່ງຢູ່ຢ່າງເຄັ່ງຕຶງ. ສ່ວນຂ້າພະເຈົ້ານັ້ນມີແຕ່ຍືນເຊີຍຊົມທັດສະນີຍະພາບຂອງທຳມະຊາດຢູ່ເທົ່ານັ້ນ.

ຂ້າພະເຈົ້າຄຶດຊື່ນຊົມຢູ່ໃນໃຈ: "ບ້ານເກີດເມືອງນອນຂອງເຮົານີ້ສວຍງາມເປັນພິເສດ ! ທິວທັດແຫ່ງນີ້ສວຍງາມກ່ວາ "ປະຕູໂຂງເຂົ້າປະເທດອິນເດຍ" ທີ່ລືຊື່ນັ້ນ. ຢູ່ນີ້ງາມກ່ວາ ສີລັງກາ ແລະຄາລີຟໍເນຍ..."

ຂ້າພະເຈົ້າໄດ້ຫວນຄຶດເຖິງບັນດາຝັ່ງທະເລຕ່ຳແລະງຽບເຫງົາທີ່ອາຟະລິກກາໃຕ້, ແມັກຊິກ ທີ່ຮ້ອນຈັດແລະບັນດາປ່າໄມ້ອັນອົບເອົ້າແລະປຽກຊຸ່ມໃນດິນແດນທີ່ຕົກເປັນກຳມະສິດຂອງດານບີຢັງ...

ນົກໃຫຍ່ປີກແຫລມໂຕຫນຶ່ງບິນຜ່ານເທິງຫົວຂອງຂ້າພະເຈົ້າໄປ ແລ້ວຮ້ອງແຈດຂຶ້ນດ້ວຍສຽງອັນດຸຮ້າຍ. ມັນລ່າຕາມນົກນ້ອຍຕົວໃດຕົວຫນຶ່ງທີ່ພວມຫລົບລີ້ຢູ່ໃນພຸ່ມໄມ້. ຂ້າພະເຈົ້າຫລຽວຄືນຫລັງ. ໂດບີພວມນັ່ງຢູ່ເທິງໂງ່ນຫີນຫນຶ່ງແລະຈ້ອງແນມໄປຍັງທິດກົງກັນຂ້າມກັບຝັ່ງທະເລ.

ເພິ່ນກວັກມືເອີ້ນຂ້າພະເຈົ້າ.

- ມານີ້, ເຊມຸຍແອນ.

- ຈ້າວ, ທ່ານ, - ຂ້າພະເຈົ້າໄປໃກ້ເພິ່ນ.

ເພິ່ນຊີ້ໄປໃສ່ດອຍທີ່ຕັ້ງຢູ່ໃກ້ງພູ້ນ ແລະຖາມວ່າ: ຢູ່ທາງຫລັງຫ້ວຍນີ້ມີຫຍັງບໍ່?

"ບະ, ເພິ່ນຢາກຈະພິສູດເບິ່ງວ່າ ເຮົາເປັນຄົນເຂດນີ້ແທ້ຫລືບໍ່ໃດຫັ້ນ", - ຂ້າພະເຈົ້າຄຶດ ແລະສະຫນອງຄວາມສະຫລອກກອກຂອງເຈົ້ານາຍ ເພື່ອໃຫ້ເພິ່ນພໍໃຈ.

- ຢູ່ທາງພຸ້ນຍັງມີຫ້ວຍອີກສອງສາມຫ້ວຍ, ແຕ່ບໍ່ແຄບຄືທາງອຸໂມງໂພມາ, ທ່ານເຫັນບໍ່, ຕໍ່ຈາກຫັ້ນ, ທາງນ້ອຍເສັ້ນນັ້ນມັນວຽນອ້ອມດອຍເທບທິດາແລະເບັ່ງເລິກເຂົ້າໄປໃນພູ. ຢູ່ຫັ້ນມີທາງເກົ່າສາຍຫນຶ່ງແລະມີບັນດາບໍ່ຖ່ານຮ້າງ...

- ເອີ...ເຈົ້າຄືຈະຮູ້ກ່ຽວກັບບໍ່ຖ່ານເຫລົ່ານັ້ນບໍ່ຫລາຍກໍຫນ້ອຍຕິເນາະ?

ຂ້າພະເຈົ້າບໍ່ເຄີຍຕັ້ງໃຈວ່າຈະໄປສອບເສັງວິຊາປະຫວັດຂອງບໍ່ຖ່ານແຫ່ງ ແອຊູໂອເຣີ ຈັກເທື່ອ. ແຕ່ຂ້າພະເຈົ້າກໍເຄີຍໄດ້ຍິນເລື່ອງກ່ຽວກັບພວກມັນໄດ້ແດ່ເລັກນ້ອຍໃນຂະນະທີ່ພໍ່ຂອງ

ຂ້າພະເຈົ້າເລົ່າສູ່ແມ່ແລະລູງຟັງກ່ຽວກັບຄະດີຟ້ອງຮ້ອງຕໍ່ສານ ເພື່ອແຍ່ງຊີງຊິ່ງກັນແລະກັນຂອງພວກທີ່ມີຫຸ້ນສ່ວນ. ຂ້າພະເຈົ້າຍົກບ່າແລະຕອບ:

- ຕາມເຂົາເຈົ້າເວົ້າ, ເມື່ອກ່ອນທາດແຮ່ຢູ່ແຫ່ງນີ້ກອງເປັນຄູພູເປັນສາຍອອກມາຢ່າງຫນາແຫນ້ນ. ເນື່ອງຈາກວ່າຕະຫລອດເວລາທີ່ຜ່ານພົ້ນມາເປັນຮ້ອຍໆປີນັ້ນ ເຂົາເຈົ້າເລີຍຂຸດຄົ້ນໄປຫມົດ. ໃນໄລຍະຫນຶ່ງຮ້ອຍຫ້າສິບປີມານີ້, ພວກເຈົ້າຂອງບໍ່ໄດ້ທຳການຂຸດຄົ້ນເລິກເຂົ້າໄປໃຈກາງພູ. ແນ່ນອນວ່າຍິ່ງຂຸດເລິກລົງໄປເທົ່າໃດຄຸນນະພາບຖ່ານກໍຍິ່ງຫລຸດນ້ອຍຖອຍລົງເທົ່ານັ້ນ ແລະການຂຸດຄົ້ນກໍບໍ່ສາມາດໃຫ້ຜົນກຳໄລໄດ້ອີກຕໍ່ໄປ. ທ່ານ ຂ້າພະເຈົ້າຍັງຈື່ ຕອນທີ່ເຂົາເຈົ້າປະບໍ່ຖ່ານຕ່າງໆຢູ່ຂ້າງປ່າ ປາຕຣິກແລະບໍລິເວນທີ່ສູງກ່ວານັ້ນໄດ້ດີ. ສ່ວນບັນດາບໍ່ທີ່ຢູ່ໄກໆນັ້ນຖືກປະຮ້າງມາແຕ່ດົນແລ້ວ. ຢູ່ ແອຊູໂອເອີຂອງພວກເຮົານັ້ນ ບໍ່ມີໃຜຄິດເຖິງພວກມັນອີກແລ້ວ...

- ເອີ...ຊ່າງເປັນເນາະ, - ໂດບີ ເວົ້າ, ປານກັບວ່າເພື່ອເປັນການໃຫ້ຄຳຕອບແກ່ຄວາມຄິດຕ່າງໆຂອງຕົນນີ້ແຫລະ.

ໃນເວລານັ້ນເອງ, ບັນດາຮູບພາບຕັ້ງແຕ່ຄາວເຍົາໄວກໍປະກົດຂຶ້ນມາໃນມັນສະຫມອງຂອງຂ້າພະເຈົ້າພໍມົວໆ. ຍາມລະດູຫນາວທີ່ ແອຊູໂອເອີ, ພວກແມ່ຍິງທີ່ຍາກຈົນໃນເຂດນອກກຳແພງເມືອງໄດ້ພາກັນຖືກະຕ່າໃຫຍ່ໆໄປຍັງບໍ່ຖ່ານຮ້າງເຫລົ່ານັ້ນ. ນະທີ່ນັ້ນ ເຂົາເຈົ້າຄວັກໆຄ້ວາໆ, ຊອກຄົ້ນຫມົ້ນຫາກອງເສດຖ່ານຕ່າງໆ, ຢູ່ຕາມຫລືບຂີ້ຝຸ່ນດຳໆທີ່ປົນເປຢູ່ກັບຫິມະທີ່ພວມເປື່ອຍເພື່ອເລືອກເລັ້ມເອົາເສດຖ່ານທີ່ຫລົງເຫລືອຢູ່ນັ້ນ. ເຂົາເຈົ້າເປ້ຫນັກຈົນຫລັງຂົດຫລັງໂຂ. ພວກແມ່ຍິງເຫລົ່ານັ້ນບ່າຍຫນ້າລົງຈາກພູກັບໄປຍັງເຮືອນຂອງຕົນ. ຈາກຄຸ້ມເຮືອນຂອງຂ້າພະເຈົ້າແນມຂຶ້ນໄປສາມາດແນມເຫັນຮູບຮ່າງອັນດຳປຶກດຳປື້ເຫລົ່ານັ້ນຕິດຕໍ່ກັນ ເປັນສາຍພົມພາບຢູ່ເທິງເປີ້ນພູທີ່ປົກຫຸ້ມໄປດ້ວຍຫິມະຂາວ, ແຕ່ເມື່ອຮອດຍາມໃກ້ຈະຄ່ຳ ບັນດາກຸ່ມຄວັນ ກໍຄ່ອຍໆລອຍເລື່ອນຂຶ້ນຈາກທໍ່ຄວັນເທິງຫລັງຄາເຮືອນຂອງເຂດນອກກຳແພງເມືອງນັ້ນຢ່າງງຽບໆ.

- ບີ ເຊມຸຍແອນ, ເຈົ້າເປັນຄົນມີຄ່າທີ່ສຸດ, - ໂດບີ ທັງຍືນຂຶ້ນ, ທັງເວົ້າດ້ວຍຄວາມສະນິດສະຫນົມ. - ເຈົ້າຮູ້ຈັກບໍລິເວນນີ້ດີກ່ວາຂ້ອຍ. ສ່ວນຂ້ອຍນີ້ຢູ່ພາກເຫນືອມາຕະຫລອດຊີ

ວິດ, ແລະເມື່ອແກ່ຄືງແລ້ວຈຶ່ງໄດ້ຍ້າຍມາຢູ່ແຖວນີ້ ພໍໄດ້ໃກ້ຕາເວັນກ່ວາເກົ່າ. ເອົາລະ, ພວກເຮົາເນືອກັນເທາະ...ຢູ່ນີ້ຮູ້ສຶກວ່າມັນເລີ່ມໜາວໆແດ່ແລ້ວ...

# V

ພາຍຫລັງກັບມາແຕ່ໄປທ່ຽວຫລິ້ນຄັ້ງນັ້ນແລ້ວ ມື້ຕໍ່ມາ ຂ້າພະເຈົ້າກໍຮູ້ສຶກປວດຫົວຢ່າງແຮງ. ພໍຕົກເຖິງຕອນທ່ຽງ, ເມື່ອຂ້າພະເຈົ້າກິນເຂົ້າບໍ່ໄດ້, ໂດບີ ຈຶ່ງເວົ້າຂຶ້ນວ່າ:

- ເຊມຸຍແອນ, ເຈົ້າຈັບໜາວແລ້ວ. ບາງທີເຈົ້າອາດພວມໄຂ້ຂຶ້ນ ແລະເປັນຫວັດ...

- ທ່ານ, ຂ້າພະເຈົ້າບໍ່ເຄີຍອ່ອນເພຍເຈັບເປັນຈັກເທື່ອ, - ຂ້າພະເຈົ້າພຶມພໍາ, ຮູ້ສຶກວ່າຮ່າງກາຍເຢັນເຢືອກໆ. - ແຕ່, ຂໍໂທດທ່ານ... ມີເທື່ອໜຶ່ງ ຢູ່ທີ່ອິນເດຍ ຂ້າພະເຈົ້າໄດ້ຕົກເຂົ້າໄປໃນໝູ່ບ້ານທີ່ເປັນພະຍາດກາລະໂລກ...

ແລ້ວຂ້າພະເຈົ້າກໍເລົ່າເລື່ອງສາດສະດາຈານ ມິນໂຮຍເຊີ ໄດ້ສີດຢາໃຫ້ຂ້າພະເຈົ້ານັ້ນສູ່ໂດບີຟັງໂດຍຫຍໍ້.

ໂດບີ ຕອບດ້ວຍຄວາມພໍໃຈວ່າ:

- ມິນໂຮຍເຊີ, ປະກົດວ່າ... ຂ້ອຍເຄີຍໄດ້ອ່ານບົດຄົ້ນຄ້ວາກ່ຽວກັບງູຂອງລາວແລ້ວ. ລາວເປັນຄົນທີ່ມີວິຊາການເລິກເຊິ່ງຜູ້ໜຶ່ງ, ແຕ່ເປັນນັກທຸລະກິດການຄ້າ. ບາງທີລາວອາດຈະໄດ້ດີມີສຸກຂຶ້ນມາດ້ວຍຢາແກ້ພິດ ແລະພວມມີຊີວິດຢູ່ຢ່າງເປັນສຸກສະໜຸກສະໜານທີ່ປະເທດຫົວເມືອງຂຶ້ນໃດໜຶ່ງ... ເອົາລະ, ເຈົ້າໄປຫ້ອງພັກຜ່ອນສາ. ຂ້ອຍຈະໃຫ້ເຈົ້າກິນຢາ, ແລ້ວມື້ອື່ນກໍຈະເຊົາດອກ.

- ທ່ານ, ທ່ານເປັນນາຍແພດຫວະ? - ຂ້າພະເຈົ້າຖາມໃນຂະນະທີ່ນອນຢູ່ໃນຫ້ອງຂອງຕົນແລະກິນຢາທີ່ເຈົ້ານາຍເອົາມາໃຫ້.

- ແມ່ນແລ້ວ, ຂ້ອຍມີໃບປະກາດສະນີຍະບັດທາງການແພດ, ແຕ່ດົນແລ້ວ ຂ້ອຍບໍ່ໄດ້ປິ່ນປົວຄົນ, - ໂດບີ ຕອບ. - ພະຍາຍາມນອນສາ, ເຊມຸຍແອນເອີຍ. ລູງ ມິກລີ ຈະເອົາກົງນໍ້າຮ້ອນມາໃຫ້ເຈົ້າຣິມຕີນ. ລາວພວມເຮັດວຽກຢູ່ເຮືອນລ້າງສັດຕາງເຈົ້າ... ອວຍພອນໃຫ້ເຈົ້າຈົ່ງເຢັນໃຈພັກຜ່ອນໃຫ້ຫາຍໄວໆ.

ຂ້າພະເຈົ້ານອນຢູ່ເກືອບມື້ຫນຶ່ງກັບຄືນຫນຶ່ງ, ໃກ້ຈະຮອດຍາມກິນເຂົ້າທ່ຽງຈຶ່ງຕື່ນ, ຮູ້ສຶກວ່າເບົາຫິວ, ສະບາຍອາລົມ ແລະຫິວເຂົ້າຢ່າງແຮງ.

ຂ້າພະເຈົ້ານັ່ງລົງຂ້າງໂຕະ, ເຊິ່ງຫນ້າກັບໂດບີ ແລະເວົ້າຂຶ້ນວ່າ:

- ຂໍຂອບໃຈທ່ານ, ຂ້າພະເຈົ້າຮູ້ສຶກສະບາຍຂຶ້ນມາຫລາຍແລ້ວ ...

- ເບິ່ງເຂົາຊິດຊຽວລົງຄືຄົນເປັນໄຂ້ຫມາກເຫລືອງນີ້ເວີຍ, - ລູງ ມິກລີທັງກ່າວພຶມພຳທັງກອກແກງລົງໃສ່ກ້ວຍ.

- ຢ່າເວົ້າແນວນັ້ນແມ້ ລູງ ມິກລີ ເຂົາພຽງແຕ່ຂາດເລືອດ ທໍ່ນັ້ນດອກ. ຂ້ອຍຈະປິ່ນປົວເຂົາໃຫ້ເຊົາຈາກພະຍາດນີ້ ...

ຫລັງຈາກກິນເຂົ້າທ່ຽງແລ້ວ ໂດບີ ກໍເຊີນຂ້າພະເຈົ້າຂຶ້ນເມືອຫ້ອງຂອງເພິ່ນທີ່ຊັ້ນເທິງ. ເພິ່ນພາຂ້າພະເຈົ້າຍ່າງເຂົ້າໄປໃນຫ້ອງເຮັດວຽກທີ່ເຕັມປົກແຕ່ຕູ້ປຶ້ມ, ເມື່ອເຫັນພາບເຫລົ່ານີ້ແລ້ວ ມັນພາໃຫ້ຂ້າພະເຈົ້າເກີດມີຄວາມເຄົາລົບສັນລະເສີນເປັນຢ່າງຍິ່ງ, ຂ້າພະເຈົ້າຈຶ່ງຫລຸດປາກອອກມາວ່າ:

- ໂຫ, ທ່ານ!

- ເອີ, ເຈົ້ານັ່ງລົງນີ້ສາ, - ໂດບີ ສະເຫນີ, ແລ້ວເລົ່າເລື່ອງກ່ຽວກັບຕົວຂອງເຈົ້າໃຫ້ຂ້ອຍຟັງ ... - ເອີ ... ຂ້ອຍຮູ້ສຶກວ່າເຈົ້າມີຄຸນທາດທີ່ດີງາມຫລາຍຢ່າງ, ຫ້າມເດັດຂາດບໍ່ໃຫ້ປິດບັງກັບຂ້ອຍ.

- ທ່ານ, ບາງທີທ່ານອາດມີເຫດມີຜົນ ... - ຂ້າພະເຈົ້າຕອບ, ພ້ອມທັງແນມເບິ່ງເພິ່ນທີ່ພວມສູບກອກລໍ່ຟັງຂ້າພະເຈົ້າເວົ້າຢູ່. - ເລື່ອງມັນຈະຍືດຍາວທີ່ສຸດ, ກ້າຈະເລີ່ມແຕ່ຕອນຂ້າພະເຈົ້າກຳເນີດເກີດມົ້ມທ້ອງແມ່ມາພຸ້ນ. ແຕ່ບາງທີ, ຊີວິດຂອງຂ້າພະເຈົ້າອາດມີວາດສະຫນາພຽງແຕ່ຈະໄດ້ເຮັດວຽກຢູ່ໃນຫ້ອງທົດລອງເທົ່ານັ້ນ. ສາດສະດາຈານ ມົນໂຣຍເຊີ ດີຕໍ່ຂ້າພະເຈົ້າເປັນພິເສດ, ເພິ່ນຕັ້ງໃຈວ່າຈະກໍ່ສ້າງຂ້າພະເຈົ້າໃຫ້ກາຍເປັນພະນັກງານຢູ່ໃນຫ້ອງທົດລອງ. ແຕ່ ກຳເວນຫຍັງກໍບໍ່ຮູ້, ໂຊກຊາຕາ ມັນໄດ້ຍອກເຢີ້ຍຂ້າພະເຈົ້າຢູ່ຕະຫລອດ ...

ຂ້າພະເຈົ້າເລົ່າເລື່ອງລັງງູສູ່ ໂດບີ ຟັງ, ແຕ່ເສີມເຕີມແຕ່ງຂຶ້ນຕື່ມວ່າ ຂ້າພະເຈົ້າໄດ້ອຳລາພາຈາກສາດສະດາຈານໄປຍ້ອນຢາກກັບບ້ານ.

- ເອີ... ເປັນອັນວ່າ ເຈົ້າເຄີຍດຳລົງຊີວິດຢູ່ ອິນເດຍ ແລະພະມ້າມາແລ້ວແມ່ນບໍ່? - ໂດບີຫລຸດປາກອອກມາ. - ບະ, ຄັນຊັ້ນເຊື່ອແນ່ວ່າເຈົ້າຕ້ອງຕິດພະຍາດໄຂ້ຫມາກເຫລືອງ. ເຈົ້າຮູ້ບໍ່ ການສີດຢາຄັ້ງນັ້ນ ສະເພາະຕົວເຈົ້າແລ້ວ ແມ່ນເປັນພິນດີທີ່ສຸດ. ບໍ່ຊັ້ນ ຍ້ອນດິນຟ້າອາກາດຢູ່ບ່ອນນີ້ ພະຍາດໄຂ້ນັ້ນກໍຈະກຳເລີບຄືນອີກ ແລະແນ່ນອນວ່າ ມັນຈະຫາລຸນເຈົ້າ. ເອົາລະ, ເຊີນເຈົ້າໄປບ່ອນຂ້ອຍ...

ໂດບີພາຂ້າພະເຈົ້າໄປຍັງຫ້ອງທີສາມ.

- ຫັ້ນ, ຫ້ອງເຮັດວຽກແລະພັກຜ່ອນຂອງຂ້ອຍ.

ມັນແມ່ນຫ້ອງຫນຶ່ງທີ່ຮຸ່ງເຮືອງປະເຫືອງງາມຢ່າງລ້ຳເລີດ. ຢູ່ເທິງໂຕະທົດລອງນັ້ນມີກາດອັນຫນຶ່ງສຳລັບໃສ່ບັນດາກະປຸກ ແລະຫລອດແກ້ວໃຫຍ່ທີ່ບັນຈຸທາດແຫລວນາໆສີ, ຢູ່ເທິງໂຕະຫນ່ວຍອື່ນມີຫລອດແກ້ວທົດລອງວາງກອງໄວ້. ເຄື່ອງປັບອາກາດທີ່ແຂວນໄວ້ຢູ່ເທິງຝານັ້ນພາໃຫ້ຂ້າພະເຈົ້າຫວນຄຶດເຫັນຫ້ອງທົດລອງຂອງສາດສະດາຈານມົນໂຣຍເຊີ ແລະຂ້າພະເຈົ້າກໍສັງເກດເບິ່ງຫ້ອງນັ້ນ ດ້ວຍສາຍຕາຂອງຄົນຜູ້ທີ່ເຂົ້າໃຈທຸກສິ່ງທີ່ຢູ່ອ້ອມຂ້າງນັ້ນໄດ້ດີ. ຢູ່ກາງຝາ, ລະຫວ່າງກາງປະຕູປ່ອງຢ້ຽມສອງປ່ອງນັ້ນມີຕູ້ໃສ່ເຄື່ອງທົດລອງຫນ່ວຍຫນຶ່ງຢູ່. ທີ່ຂອບປະຕູປ່ອງຢ້ຽມເຫລົ່ານັ້ນ, ມີບັນດາໂຖປູກຕົ້ນໄມ້ຕັ້ງລຽນກັນຢູ່ຢ່າງສະຫມ່ຳສະເຫມີ ເຊິ່ງຕາມປົກກະຕິແລ້ວ ໃຜກໍຄຶດວ່າເປັນພຽງໂຖຕົ້ນໄມ້ທຳມະດາສາມັນທີ່ສຸດ. ຢູ່ແຈຫ້ອງມີໂຕະຫນ່ວຍຫນຶ່ງທີ່ຕິດຕັ້ງເຄື່ອງແຍກສູນໄວ້. ຢູ່ເຫນືອໂຕະມີຕູ້ນ້ອຍ ຫນ່ວຍຫນຶ່ງແຂວນໄວ້. ທີ່ບານປະຕູຕູ້ນັ້ນເຫັນມີຕົວຫນັງສືຕົວໃຫຍ່ "ເອີແອມ"* ຕິດຢູ່.

ຂ້າພະເຈົ້າແນມເບິ່ງຮອບໆແລ້ວເວົ້າຂຶ້ນ:

- ທ່ານ, ວັດຖຸທຸກສິ່ງໃນຫ້ອງນີ້ເຮັດໃຫ້ຂ້າພະເຈົ້າພໍໃຈຫລາຍ, ມີແຕ່ວ່າ ຂ້າພະເຈົ້າບໍ່ປະກົດເຫັນກ້ອງຈຸລະທັດເທົ່ານັ້ນ.

---

* ເອີແອມ: ແມ່ນຊື່ຫຍໍ້ຂອງກ້ອງຈຸລະທັດເອເລັກໂຕຣນິກ.

- ເອີ... ກ້ອງຈຸລະທັດມີຄວາມຈຳເປັນສະເພາະນັກຈຸລະຊີບວິທະຍາ. ເຂົາເຈົ້າໃຊ້ມັນເພື່ອສັງເກດເບິ່ງຈຸລິນຊີທີ່ເປັນຜູ້ໃຫ້ກຳເນີດພະຍາດຕິດແປດ ສ່ວນຂ້ອຍມີແຕ່ສົນໃຈນຳຕົວການທີ່ກໍ່ໃຫ້ເກີດພະຍາດເຊິ່ງກ້ອງຈຸລະທັດບໍ່ສາມາດຈະສ່ອງເຫັນໄດ້ເທົ່ານັ້ນ.

ຂ້າພະເຈົ້າຮ້ອງຂຶ້ນ:

- ວິຣຸດ?

ໂດບີ ເຮັດຕາຮີບເຂົ້າດ້ວຍຄວາມສົນໃຈ.

- ໂອ່ ເຊມຸຍແອນ! ບາງທີ ຕອນເຈົ້າຢູ່ນຳອີ່ດາ... ມິນໂຮຍເຊີ ນັ້ນ ມັນ ບໍ່ ແມ່ນເລື່ອງທຳມະດາໃດເນາະ. ຈັ່ງໃດ, ຍາມໃດລາວກໍກົ້ມສ່ອງເບິ່ງແຕ່ກ້ອງຈຸລະທັດແມ່ນບໍ່? - ໂດບີ ຖາມແບບທຳນອງສຽດສີ.

ຂ້າພະເຈົ້າເຫັນວ່າ ຈຳເປັນຕ້ອງໄດ້ອອກແຮງປົກປ້ອງເອົາສາດສະດາຈານຜູ້ມີນ້ຳໃຈເອື້ອເຟື້ອເກື້ອກູນຂອງຕົນ, ດັ່ງນັ້ນຈຶ່ງເວົ້າຕອບຄຳສຽດສີເຍາະເຍີ້ຍຂອງ ໂດບີຢ່າງເຄັ່ງຂຶມວ່າ:

- ກະບໍ່ເຖິງຂັ້ນນັ້ນດອກ. ແຕ່ເວົ້າລວມະແລ້ວຫ້ອງທົດລອງບໍ່ມີກ້ອງຈຸລະທັດນັ້ນມັນເປັນເລື່ອງແປກທີ່ສຸດ.

- ນີ້, ເຈົ້າຮູ້ບໍ່, ເພື່ອຊີ້ຄົ້ນຄ້ວາວິຣຸດນັ້ນ, ກ້ອງຈຸລະທັດ ເຖິງວ່າ ມັນຈະສົມບູນພຽງໃດກໍຍັງເກີ້ເຂີນຢູ່. ມັນຈະເປັນເລື່ອງທີ່ຫນ້າຢາກຫົວຄືກັນກັບກ້ອງສ່ອງໃນໂຮງລະຄອນຢູ່ໃນກຳມືຂອງນັກດາລາສາດເຊິ່ງລາວກະວ່າຈະໃຊ້ມັນເພື່ອຄົ້ນຄ້ວາການປະກອບສ້າງ ພະຫຸລັງສີທັງເຈັດຂອງດວງດາວພະສຸກຫລືດາວຊ້າງນີ້...

- ທ່ານ, ຂ້າພະເຈົ້າຍັງບໍ່ເຄີຍເຫັນສາດສະດາຈານ ມິນໂຮຍເຊີປະພຶດຕົນເປັນຫນ້າຢາກຫົວຈັກເທື່ອ, - ຂ້າພະເຈົ້າເວົ້າຢ່າງເຊື່ອງຊ້າ, ແລະບໍ່ສາມາດຈະຊຸກເຊື່ອງຄວາມເຈັບແຄ້ນແຫນັນໃຈໄວ້ໄດ້.

- ນີ້ ເຊມຸຍແອນ, ເຈົ້າບໍ່ເຂົ້າໃຈ, ຂ້ອຍພຽງແຕ່ເວົ້າຢອກຊື່ໆດອກ, - ໂດບີຫຍຸມຄິ້ວເຂົ້າ. - ແລະປະກົດວ່າພວມໂມໂຫຕໍ່ສາດສະດາຈານ ມິນໂຮຍເຊີຂອງຂ້າພະເຈົ້າ. ແຕ່, ອີງໃສ່ຄວາມເວົ້າຂອງເຈົ້າແລ້ວ, ນັກວິຊາການຜູ້ນັ້ນ ສົນໃຈນຳແຕ່ເລື່ອງເຮັດຈັ່ງໃດໃຫ້ສັດລີເລືອໃນສວນງູຂອງລາວຫວິດຈາກການເຈັບປ່ວຍ. ບາງທີລາວອາດຈະສັງເກດເບິ່ງຮອດພະຍາດຄີ

ຣຸດຢູ່ໃນໂດງ. ເຈົ້າບໍ່ຮູ້ຫວະ? ເກືອບຂັ້ນວ່າລາວໄດ້ໃຫ້ເຈົ້າອ່ານປື້ມກ່ຽວກັບ ວີຣຸດ ນັ້ນກໍ ຫມາຍຄວາມວ່າລາວໄດ້ຄາດຄະເນເກືອບບັນຫານັ້ນແລ້ວ.

ໂດບີ ຍ່າງໄປທີ່ປ່ອງຢ້ຽມແລະຊີ້ໃສ່ບັນດາໂກປູກຕົ້ນໄມ້ຕ່າງໆເຫລົ່ານັ້ນ.

– ການຄົ້ນຄ້ວາວີຣຸດຕ້ອງເລີ່ມຈາກການສັງເກດຕົ້ນໄມ້ທີ່ເກີດພະຍາດ ຢ່າງລະອຽດລະອໍ, ເຂົາເຈົ້າເອົາພວກມັນມາປຽບທຽບໃສ່ກັບພືດຕົວຢ່າງທີ່ຍັງດີຢູ່, ຕິດຕາມເບິ່ງການຂະຫຍາຍຕົວຂອງພະຍາດ, ເຈົ້າເບິ່ງເດີ, ນັ້ນແມ່ນຕົ້ນໄມ້ທີ່ອາຍຸຍັງອ່ອນແລະແຂງແຮງດີ – ມັນແມ່ນຕົ້ນຢາສູບ. ສ່ວນອັນນີ້ ແມ່ນຕົ້ນໄມ້ຕົວຢ່າງທີ່ເກີດພະຍາດກະດັນຕາບົ້ງ.

ກ່ອນນີ້ຂ້າພະເຈົ້າເຄີຍໄດ້ເຫັນຢາສູບທີ່ເປັນພະຍາດກະດັນຕາບົ້ງມາແລ້ວ. ໂດບີ ອະທິບາຍຕໍ່:

– ນີ້ແມ່ນຕົ້ນຫມາກເຂືອສົ້ມທີ່ຍັງບໍລິສຸດປອດໃສຢູ່. ເຈົ້າເບິ່ງດູ, ໃບຂອງມັນງາມສໍ່າໃດ. ສ່ວນຕົ້ນທີ່ເປັນພະຍາດນີ້ ມັນເປັນຈັ່ງໃດລະ? ໃບຂອງມັນຢູ່ໃສ? ມັນລີບເຂົ້າເທົ່າສາຍໄຫມຫຍິບເທົ່ານັ້ນຕ່ວາ. ເຈົ້າຊິຈື່ໄດ້ບໍ່ວ່ານີ້ແມ່ນຕົ້ນເຂົ້າຝ່າງຫາງມ້າ? ຄວນແທ້ມັນຕ້ອງກອກຮວງແລ້ວ, ແຕ່ກັບມາເປັນຮູບອຸບາດແບບນີ້! ນັ້ນແມ່ນພະຍາດ ວີຣຸດ ຊະນິດຫນຶ່ງເຊິ່ງເຂົາເຈົ້າເອີ້ນວ່າ "ປະຕິກິລິຍາດັກແດ້".

ໂດບີ ເອົາຮູບສອງແຜ່ນອອກມາ. ກ່ອນອື່ນຫມົດ ລາວຊີ້ໃສ່ແຜ່ນຫນຶ່ງ.

– ນີ້ແມ່ນຫຍັງ?

ຂ້າພະເຈົ້າອ່ານຕົວອັກສອນທີ່ຂຽນໄວ້ເບື້ອງລຸ່ມນັ້ນ.

– "ຕົ້ນອ້ອຍ".

ຕົ້ນອ້ອຍປົ່ງຂຶ້ນສູງຢ່າງໄດ້ສ່ວນ. ລໍາຂອງມັນມີທາດນໍ້າຕານບັນຈຸຢູ່ຫລາຍ. ດ້ວຍເຫດນັ້ນເຂົາເຈົ້າຈຶ່ງສ້າງນິຄົມປູກອ້ອຍຂຶ້ນມາ... ແຕ່ອັນນີ້ຄືນິຄົມອ້ອຍທີ່ ເກີດພະຍາດ ວີຣຸດ...

ແລ້ວ ໂດບີ ກໍເອົາຮູບແຜ່ນທີ່ສອງໃຫ້ຂ້າພະເຈົ້າເບິ່ງ.

– ແຕ່ອັນນີ້ ໃສຊິແມ່ນອ້ອຍ! – ຂ້າພະເຈົ້າຮ້ອງຂຶ້ນ.

ສິ່ງຂ້າພະເຈົ້າເຫັນຢູ່ເທິງຮູບນັ້ນແມ່ນພຸ່ມໄມ້ອຸບາດປະຫລາດຕາອັນໃດອັນຫນຶ່ງທີ່ມີໃບຄືໃບຫຍ້າ. ບໍ່ປະກົດເຫັນຮ່ອງຮອຍຂອງຕົ້ນອ້ອຍທີ່ສົມສ່ວນຢູ່ຈັກບ່ອນເລີຍ.

- ບໍ່, ນັ້ນແມ່ນຕົ້ນອ້ອຍອີຫລີນີ້ແຫລະ, ເຫດພົນຂອງມັນກໍມີຢູ່ວ່າ ມັນ ຕິດເຊື້ອ ວິຣຸດພິເສດຊະນິດຫນຶ່ງເທົ່ານັ້ນ. ຍ້ອນພິນສະທ້ອນຂອງວິຣຸດ, ຕົ້ນອ້ອຍຈຶ່ງບໍ່ສາມາດເຕີບໂຕຂຶ້ນໄດ້...

ປຶ້ມຮູບຊ່ວຍໃຫ້ຂ້າພະເຈົ້າໄດ້ແນມເຫັນຕົ້ນໄມ້ຫລາຍຊະນິດ ຊຶ່ງຕິດເຊື້ອວິຣຸດຊະນິດທີ່ແຕກຕ່າງກັນ.

ໂດບີກ່າມຂ້າພະເຈົ້າ:

- ຈາກສິ່ງທີ່ເຫັນປະຈັກຕານີ້ ພວກເຮົາຈຳເປັນຕ້ອງກອດອອກມາເປັນຂໍ້ສະຫລຸບລວມຄືແນວໃດ?

- ຂ້າພະເຈົ້າບໍ່ຮູ້, - ຂ້າພະເຈົ້າສາລະພາບດ້ວຍຄວາມຈິງໃຈ.

ໂດບີຕອບ:

- ສາມາດຈະສະຫລຸບໄດ້ວ່າ: ວິຣຸດ ມີພິນກະທົບຢ່າງເລິກເຊິ່ງຕໍ່ລັກສະນະພາວະວິໃສຂອງຕົ້ນໄມ້ທີ່ເປັນພະຍາດ; ຕໍ່ການເຕີບໃຫຍ່ຂະຫຍາຍຕົວຂອງມັນ. ເຈົ້າເບິ່ງກົກໄມ້ນີ້ດູ... ຢູ່ນີ້ດ້ວຍພິນສະທ້ອນຂອງວິຣຸດໃບຕ່າງໆຂອງມັນປົ່ງຂຶ້ນມາຈາກໃບ.

ແມ່ນແນວນັ້ນແທ້, ຂ້າພະເຈົ້າຮູ້ສຶກແປກໃຈເມື່ອເຫັນໃບນ້ອຍໆປົ່ງຂຶ້ນມາປົກເອົາໃບໃຫຍ່. ຜ່ານຈາກຮູບໃບນັ້ນ, ຂ້າພະເຈົ້າເຫັນລຳຂອງຕົ້ນໄມທີ່ເປັນພະຍາດນັ້ນຄົດໆງໍໆໄປ, ສ່ວນໃບນັ້ນກໍປ່ຽນຮູບຮ່າງໄປຢ່າງປະຫລາດ. ດອກຂອງມັນທີ່ດໍເຂົ້າເບິ່ງແລ້ວແປກປະຫລາດ, ປະກົດວ່າພວກມັນລ່ອຍລາໄປຍ້ອນຄວາມເຈັບປວດອັນມິດງຽບ. ຮູບຮ່າງອຸບາດປະຫລາດຕ່າງຂອງດວງມາລາຕ່າງໆ, ສີສັນອັນເສົ້າລ່າຂອງພວກມັນ - ທຸກສິ່ງເຫລົ່ານັ້ນ ເຮັດໃຫ້ພວກມັນມີເອກະລັກທີ່ພິດສະດານທີ່ສຸດ.

- ແລ້ວບາດນັ້ນ ພວກເຮົາຈະປຶກສາກ່ຽວກັບເລື່ອງນີ້ໃຫ້ລະອຽດກີ່ກ້ອນກ່ວານີ້, - ໂດບີເວົ້າພ້ອມທັງມ້ຽນຮູບເຂົ້າໄວ້ໃນໂຕະ.

ຫລັງຈາກນັ້ນ ເພິ່ນກໍລ້າງມືດ້ວຍສະບູແລ້ວຍ່າງມາໃກ້ຂ້າພະເຈົ້າ:

- ເຊມຸຍແອນ, ບາດນີ້ ເຈົ້າລອງເດີມມານີ້ເບິ່ງດູ...

ໂດບີ ກໍເອົາຊີແລ້ງສິດຢາ.

- ບໍ່, ບໍ່, ທ່ານ, ຂໍທ່ານຢ່າໄດ້ເປັນຫ່ວງ, - ຂ້າພະເຈົ້າເຊື່ອງມືໄວ້ທາງຫລັງ. - ຂ້າພະເຈົ້າຮູ້ສຶກໄຄກ່ວາເກົ່າຫລາຍແລ້ວ.

ໂດບີເວົ້າຢ່າງເຄັ່ງຄັດ:

- ແລ້ວແຕ່ເຈົ້າ, ແຕ່ຄັນຂ້ອຍໄດ້ເວົ້າແລ້ວພັນບໍ່ມັກຜິດຄວາມໃດ ...

ເຊົ້າມື້ຕໍ່ມາ, ຂ້າພະເຈົ້າກໍຮູ້ສຶກວ່າຫນັກຫນ່ວງໃນຮ່າງກາຍຄືນອີກ. ບໍ່ຕ້ອງສົງໄສອີກແລ້ວ, ພະຍາດໄຂ້ຫມາກເຫລືອງພວມທາລຸນຂ້າພະເຈົ້າ. ເປັນອັນວ່າຂ້າພະເຈົ້າເປັນຜູ້ສະເຫນີໃຫ້ ໂດບີ ສີດຢາໃຫ້ເອງ.

ພາຍຫລັງສີດຢາໃຫ້ຂ້າພະເຈົ້າແລ້ວ, ຂະນະທີ່ມ້ຽນຊີແລ້ງເຂົ້າຕູ້, ໂດບີ ເວົ້າດ້ວຍສຳນຽງທີ່ບໍ່ຄ່ອຍພໍໃຈວ່າ:

- ເຊມຸຍແອນ, ຂ້ອຍເຄີຍເຕືອນເຈົ້າແລ້ວບໍ່ແມ່ນຫວະ. ເຈົ້າລິງໄປຕະລ່າງສາ, ເຈົ້າບໍ່ຕ້ອງເຮັດວຽກກາງຄືນອີກ. ອີກສາມມື້ໃຫ້ເຈົ້າຂຶ້ນມາຊ່ວຍວຽກຂອງຂ້ອຍຢູ່ນີ້ ...

ເຊົ້າມື້ທີ່ສີ່, ໂດບີ ສັກຢາໃຫ້ຂ້າພະເຈົ້າອີກເຂັມຫນຶ່ງແລະແຖຫນວດໃຫ້ຂ້າພະເຈົ້າ.

- ເອົາລະ ນຸ່ງເສື້ອຄຸມຂາວໃສ່ ແລ້ວພວກເຮົາຈະໄດ້ລົງມືເຮັດວຽກ, - ເພິ່ນເວົ້າ. - ຂ້ອຍຕ້ອງການທຳການທົດລອງນ້ອຍບາງຢ່າງ ... ແຕ່ຟ້າວກ່ອນ, ກ່ອນອື່ນຫມົດຂ້ອຍຢາກຈະກວດກາເບິ່ງຄວາມຮັບຮູ້ຂອງເຈົ້າກ່ອນ ... ເຈົ້າຮູ້ຫຍັງແດ່ກ່ຽວກັບວິຣຸດ?

## VI

- ເອີ ... - ເມື່ອຟັງຂ້າພະເຈົ້າເວົ້າໄປແລ້ວ, ໂດບີ ກໍຫັນໃຈພໍ່ງຢູ່. - ບໍ່ມີທາງຈະເຂົ້າໃຈວິຣຸດ ໄດ້ຖ້າບໍ່ທັນກຳໄດ້ມູນທາດທາງດ້ານເຄມີຊີວະວິທະຍາ. ແຕ່ຂ້ອຍຈະພະຍາຍາມອະທິບາຍໃຫ້ເຈົ້າເຂົ້າໃຈສ່ວນໃດສ່ວນຫນຶ່ງ. ກ່ອນທີ່ຈະໄປເກີງອີ່ດາ ... ມິນໂຣຍເຊີ ນັ້ນ ເຈົ້າຮຽນຢູ່ໃສ?

- ຂ້າພະເຈົ້າສຳເລັດການສຶກສາຊັ້ນເອກທີ່ວິທະຍາໄລ ດີຢັງ, - ຂ້າພະເຈົ້າຕອບຢ່າງກ່ອມຕົວ.

- ແມ່ນຫຍັງເກາະ? ເຈົ້າຮຽນຢູ່ວິທະຍາໄລດີຍັງຊັ້ນຫວະ? - ໂດບີແປກໃຈ. - ຈັ່ງໃດ, ພໍ່ແມ່ຂອງເຈົ້າເປັນຄົນຮັ່ງມີຫວະ?

- ບໍ່ດອກ, - ຂ້າພະເຈົ້າໜ້າແດງອີ່ຂຶ້ນ. - ຜູ້ອຸດໜູນໃຫ້ຂ້າພະເຈົ້າໄດ້ໄປຮຽນນັ້ນຕ່າງຫາກທີ່ເປັນຄົນຮັ່ງມີ. ແຕ່ເພິ່ນພົບກັບໄພພິບັດແລະ... ບາງທີເພິ່ນອາດເສຍໄປແລ້ວ. ສ່ວນພໍ່ຂອງຂ້າພະເຈົ້າຈັ່ງໃດຈຶ່ງຊິໄປມີເງິນຄຳກຳແກ້ວຄືແນວນັ້ນ.

- ເອີ... ເຈົ້າຟັງນີ້ເດີ... - ໂດບີຢຸດຕິເລື່ອງທຸກຍາກຂາດເຂີນຂອງຄອບຄົວຂ້າພະເຈົ້າໄປຢ່າງສຸພາບ. - ເຈົ້າຈະຕ້ອງຮູ້ວ່າວັດຖຸທຸກຢ່າງທີ່ຢູ່ອ້ອມຂ້າງຂອງພວກເຮົາລ້ວນແຕ່ເກີດຂຶ້ນມາຈາກມູນທາດ. - ມີເກົ້າສິບສອງມູນທາດເຄມີ*, ທຳອິດແມ່ນ ຮີໂດຣ, ສຸດທ້າຍແມ່ນອູຣານ. ບັນດາປະລາມະນູຂອງບັນດາມູນທາດໂຮມກັນເຂົ້າເປັນ ມໍເລກຸນ, ແລະບັນດາ ມໍເລກູນນັ້ນ...

- ແມ່ນແລ້ວ ທ່ານ, - ຂ້າພະເຈົ້າຈຳຕ້ອງເວົ້າໃຫ້ເພິ່ນຮູ້ນຳ. - ທາງດ້ານວິຊາເຄມີສາດ, ຢູ່ໃນໃບປະກາດສະນີຍະບັດ ເຂົາເຈົ້າໄດ້ໃຫ້ຄະແນນດີແກ່ຂ້າພະເຈົ້າ. ແຕ່ ຂໍທ່ານຈົ່ງອະໄພ, ຂ້າພະເຈົ້າຍິນດີທີ່ຈະຮັບຟັງທ່ານເວົ້າ.

- ຈັ່ງຊັ້ນໝາຍຄວາມວ່າ ແຕ່ລະທາດລ້ວນແຕ່ປະກອບສ້າງຂຶ້ນມາຈາກບັນດາ ມໍເລກູນ ແລະມີລັກສະນະພິເສດທີ່ເປັນເອກະລັກຂອງມັນເອງ. ສົມມຸດທາດກົວບິນ ແມ່ນລວມມີ ມໍເລກູນກົວບິນ. ພວກເຮົາຮູ້ຈັກເຖິງສ່ວນປະກອບເຄມີ, ການສັບຊ້ອນແລະປະລິມານປະລາມະນູຂອງມັນໄດ້ດີແລ້ວ. ແຕ່ຖ້າເຮົາທຳການປ່ຽນແປງວິທີສັບຊ້ອນຫລືປະລິມານຂອງບັນດາປະລາມະນູໃນມໍເລກູນກົວບິນໜຶ່ງ, ເອົາປະລາມະນູໃໝ່ຕື່ມເຂົ້າໃສ່, ແຕ່ໂຮມພວກມັນຄືນໃໝ່, ແລ້ວຈະມີມໍເລກູນໜຶ່ງທີ່ບໍ່ແມ່ນກົວບິນ, ແຕ່ຈະແມ່ນທາດອື່ນອີກຢ່າງໜຶ່ງ - ສົມມຸດຄືຊິນຄໍບິນ ຫລືກູແປຮັ່ງຈັ່ງຊັ້ນ.

- ປະກົດວ່າມັນກືກຊຸດຄົ້ນມາຈາກຕົ້ນກົວບິນແມ່ນບໍ່? - ຂ້າພະເຈົ້າຖາມ.

- ແມ່ນ. ແຕ່ໃນບັນດາທາດຈຳນວນຫລວງຫລາຍນັ້ນ, ມີທາດເຄມີບາງຢ່າງທີ່ດຶງດູດຈິດ

---

* ຜູ້ປະພັນຂຽນປຶ້ມນີ້ສຳເລັດໃນປີ ໑໙໔໕. ເວລານັ້ນວິທະຍາສາດຫາກໍ່ຄົ້ນພົບພຽງ ໙໒ ທາດມູນເຄມີເທົ່ານັ້ນ (ຄຳອະທິບາຍຂອງຄະນະບັນນາທິການ).

ໃຈເຮົາຍິ່ງ - ນັ້ນແມ່ນບັນດາທາດ ໂປຣຕີນ. ໂປຣຕີນ ທີ່ມີຊີວິດ ຄືພື້ນຖານແຫ່ງຄວາມມີຊີວິດ.

- ໂອ້, ຂ້າພະເຈົ້າເຂົ້າໃຈແລ້ວ ທ່ານ.

- ໃນປີ ໑໗໔໗ ແບັກກາຣີ ສາມາດຈຳແນກທາດໂປຣຕີນທີ່ງ່າຍດາຍທີ່ສຸດຄື ກລູແຕນໄດ້, ແລະຈາກນັ້ນເຂົາເຈົ້າກໍຫັນມາສົນໃຈກັບໂປຣຕີນໃນຖານະວ່າ ມັນກໍແມ່ນທາດເຄມີຢ່າງຫນຶ່ງ. ຕໍ່ມາບັນດານັກເຄມີສາດໄດ້ຈຳແນກທາດໂປຣຕີນຕ່າງໆຫລາຍຢ່າງຈາກສັດແລະບັນດາຈຸລັງຂອງພືດສາຊາດ. ການວິໄຈຄົ້ນຄ້ວາພາໃຫ້ພວກເຮົາເຫັນວ່າການປະກອບສ້າງຂອງມໍເລກູນທາດໂປຣຕີນແມ່ນສັບສົນທີ່ສຸດ. ກ່ອນຫນ້ານີ້ປະມານຫົກສິບປີ, ມີນັກປາດຈຳນວນຫນຶ່ງຄາດຄະເນເອົາໄວ້ວ່າ ຈະໃຊ້ກຳມະວິທີທາງດ້ານເຄມີສາດເພື່ອສ້າງມໍເລກູນໂປຣຕີນຂຶ້ນມາຈາກບັນດາທາດມູນອື່ນໆ. ຄວາມຈິງ, ເຂົາເຈົ້າກໍສາມາດເກັບກູ້ພະລິດຕະພັນສັບພະທາດທີ່ຫນ້າສົນໃຈຂຶ້ນມາໄດ້ໃນຫ້ອງທົດລອງ. ພວກມັນມີປະຕິກິລິຍາຕໍ່ທາດ ໂປຣຕີນ, ແຕ່ມັນຊໍ້າບໍ່ແມ່ນທາດໂປຣຕີນເລີຍ. ໃນຂະນະນັ້ນ, ຖ້າຫາກສາມາດສ້າງທາດໂປຣຕີນທຽມຂຶ້ນມາໄດ້ແລ້ວເຊມຸຍແອນເອີຍ, ໄຊຊະນະດັ່ງກ່າວຂອງວິທະຍາສາດຈະຍິ່ງໃຫຍ່ບໍ່ຈັກວ່າເທົ່າໃດ!

ຂ້າພະເຈົ້າງຽບຢູ່. ບໍ່ຢາກກ່າວຍໍ້າຄືນວ່າຂ້າພະເຈົ້າຮັບຮູ້ສິ່ງນັ້ນ ໂດຍຜ່ານການຟັງ ບັນດາບົດບັນຍາຍວິຊາເຄມີສາດມາເປັນຢ່າງດີແລ້ວ.

- ດຽວນີ້ ເຂົາເຈົ້າຮູ້ວ່າທາດໂປຣຕີນສາມາດປ່ຽນລັກສະນະເປັນຢາງກອກໃສທີ່ຄ້າຍຄືວຄືກັບທາດເຄມີອື່ນໆ, ຄົ້ນຊື່ນກໍຫມາຍວ່າ ທາດໂປຣຕີນແມ່ນທາດເຄມີທຳມະດາສາມັນຢ່າງຫນຶ່ງ. ດ້ວຍເຫດນັ້ນນັບແຕ່ນັ້ນມາ ນັກປາດທັງຫລາຍຈຶ່ງລົງເລິກໃນການຄົ້ນຄ້ວາທາດແທ້ທາງເຄມີສາດຂອງມໍເລກູນທາດໂປຣຕີນ ແລະຮູ້ຈັກລາຍລະອຽດຫລາຍຢ່າງໃນດ້ານການປະກອບສ້າງຂອງມັນໄດ້ດີ, ແຕ່... - ໂດບີ ຣົບຍາສູບຮູດຍາວໆບາດຫນຶ່ງ, - ແຕ່ກະທັ້ງປະຈຸບັນນີ້ກໍຍັງບໍ່ທັນມີໃຜສາມາດນຳເອົາໂຄງສ້າງ ກ່ຽວກັບມໍເລກູນໂປຣຕີນແບບມີລັກສະນະພາວະວິໄສແລະຄ້າຍຄຶງກັບຄວາມຈິງສ່ວນໃດສ່ວນຫນຶ່ງອອກມາໄດ້ເທື່ອ...

- ຫນ້າເສຍດາຍທີ່ສຸດເນາະ ທ່ານ, - ຂ້າພະເຈົ້າເວົ້າ, - ບໍ່ວ່າຕີ ວ່າຊິບໍ່ສາມາດປະດິດສິ່ງໃດສິ່ງຫນຶ່ງຂຶ້ນມາໄດ້ເພື່ອຈະ...

- ເອີ... ປະດິດ.... - ໂດບີ ແນມເບິ່ງຂ້າພະເຈົ້າດ້ວຍສາຍຕາບໍ່ພໍໃຈ. - ຫນ້າທີ່ຂອງນັກວິທະຍາສາດຕ້ອງສັງເກດການ, ແລ້ວນໍາເອົາສິ່ງທີ່ສັງເກດການໄດ້ນັ້ນ, ກອດອອກມາເປັນຂໍ້ມູນອັນຖືກຕ້ອງແລ້ວທໍາການທົດລອງ. ແຕ່ກ່ອນຈະມີສິ່ງດັ່ງກ່າວຂຶ້ນມາໄດ້, ຈະຕ້ອງມີຄວາມຮອບຮູ້ຫລາຍທີ່ສຸດ. ຄວາມຫຍຸ້ງຍາກຂອງການທໍາການທົດລອງກັບບັນດາທາດໂປຣຕີນນັ້ນ ມັນຢູ່ບ່ອນວ່າໃນຫ້ອງທົດລອງ, ບັນດານັກວິທະຍາສາດແລະນັກສິລະສາດ ແລະເຄມີສາດທັງຫລາຍ ໄດ້ແຕ່ຄົ້ນຄ້ວາທາດໂປຣຕີນຕາຍ, ແຂ້ນກ້າມແລະຖືກປ່ຽນແປງໄປແລ້ວເທົ່ານັ້ນ. ພຽງແຕ່ຢ່າທົດລອງກາກໍຊູນຖືກມັນເທົ່ານັ້ນ ມັນກໍຈະກາຍເປັນແບບນັ້ນໄປໂລດ. ແຕ່ແລ້ວລັກສະນະພິເສດພື້ນການຂອງທາດ ໂປຣຕີນທີ່ມີປະຕິກິລິຍານັ້ນຊໍ້າຢູ່ບ່ອນທີ່ມັນສາມາດມີຊີວິດຢູ່ໄດ້.

- ແຕ່ "ມີຊີວິດຢູ່ໄດ້" ຫມາຍຄວາມວ່າຈັ່ງໃດ? - ຂ້າພະເຈົ້າຖາມ.

ໂດບີ ພໍໃຈນໍາຄໍາຖາມດັ່ງກ່າວນີ້ເປັນຢ່າງຍິ່ງ, ແລະດວງຕາຂອງເພິ່ນກໍຮຸ່ງໃສຂຶ້ນ.

- ຄວາມມີຊີວິດຄືວົງຈອນທີ່ມີການເຫນັງຕີງຕະຫລອດເວລາຂອງວັດຖຸ, ເຊນຸຍແອນເອີຍ, ມັນມີການກະທົບ, ຂະຫຍາຍຕົວແລະປ່ຽນຈາກສັນຖານນີ້ໄປສູ່ສັນຖານອື່ນ. ໃນຮ່າງກາຍຫນຶ່ງທີ່ມີຊີວິດຍາມໃດກໍມີການສະຫລາຍຕົວຂອງບັນດາມໍເລກູນນີ້ ແລະການກໍ່ສ້າງມໍເລກູນໃຫມ່ຢ່າງອື່ນຂຶ້ນມາ, ມີວິວັດການແຊກຊຶມເຊິ່ງກັນແລະກັນຢູ່ຢ່າງເນື່ອງນິດຂັດແຍ່ງແຕ່ເປັນເອກະພາບແລະອະມະຕະ. ຮຽນເອົາເດີ, ເຊນຸຍແອນ, ຈົ່ງຄຶດເຖິງບັນຫາດັ່ງກ່າວແລ້ວເຈົ້າຈະພົບສິ່ງທີ່ເຈົ້າບໍ່ເຄີຍຄຶດຝັນມາກ່ອນ ຄວາມລັບຂອງທາດໂປຣຕີນທີ່ມີຊີວິດນັ້ນແປກປະຫລາດທີ່ສຸດ, ແຕ່ກໍບໍ່ເຖິງຂັ້ນເລິກລັບພິດສະດານດອກ...

ເພິ່ນຍ່າງໄປຫາເຄື່ອງແຍກ.

- ເຊນຸຍແອນ, ເຈົ້າເຄີຍໄດ້ຍິນເພິ່ນເວົ້າເຖິງວິຣຸດມາແລ້ວ, ເຮົາບໍ່ອາດຈະແນມເຫັນມັນໄດ້ຈາກກ້ອງຈຸລະທັດຄືກັບພວກແມ່ພະຍາດ, ແຕ່ປະຕິກິລິຍາຂອງພວກມັນຊໍ້າໃຫຍ່ຫລວງທີ່ສຸດ. ແຕ່ປະລິມານຂອງວິຣຸດພຽງນ້ອຍດຽວຂອງພະຍາດກະດັນຕາບົ້ງຕົ້ນຢາສູບ ກໍສາມາດສົ່ງພະຍາດຕິດແປດໄປທົ່ວທັງນິຄົມຫນຶ່ງໄດ້. ຫນ້າທີ່ທໍາອິດແມ່ນຕ້ອງເອົາວິຣຸດບໍລິສຸດຂອງ

ພະຍາດທີ່ແຕກຕ່າງກັນໃນສັດແລະພືດສາຊາດມາໃຫ້ໄດ້. ເຄື່ອງແຍກສູນແລະລະບົບເຄື່ອງກັ່ນຕອງແມ່ນຖືກນຳໃຊ້ເຂົ້າໃນຈຸດປະສົງດັ່ງກ່າວນີ້ແລ້ວ.

ໂດບີ ຍົກຝາເຄື່ອງແຍກສູນອອກ. ເທິງແກນເພົາຕັ້ງສາກຂອງເຄື່ອງມີຮູຢູ່ສີ່ຮູທີ່ສຽບຫລອດແກ້ວໄວ້ສີ່ອັນ. ໂດບີ ແລ່ນເຄື່ອງຈັກນັ້ນ. ແກນເພົາຫັນຫລິ້ນໆຂຶ້ນ ແລະພາຍໃຕ້ການກະທົບຂອງແຮງເຄື່ອງຈັກແຍກສູນນັ້ນ, ຫລອດແກ້ວເຫລົ່ານັ້ນກໍຖືກປິ່ນໄປຕາມລວງຂວາງ.

ໂດບີ ເວົ້າຕໍ່:

- ດ້ວຍການກະທົບຂອງແຮງເຄື່ອງຈັກແຍກສູນ, ບັນດາວັດຖຸເສດນ້ອຍທີ່ນອນຢູ່ໃນທາດທ້າງຫມົດໃນຫລອດແກ້ວນີ້ກໍຈະຈົມຂ້ອນລົງພື້ນ. ບັນດາວັດຖຸທາດປະສົມທີ່ຫນັກກ່ວາຫມູ່ຈະຂ້ອນກັນລົງຢູ່ພື້ນສຸດ. ບັນດາວັດຖຸທາດປະສົມໃດເບົາກ່ວາຈະຢູ່ເບື້ອງເທິງດ້ວຍວິທີການດັ່ງກ່າວ, ເຂົາເຈົ້າໃຊ້ເຄື່ອງແຍກສູນເພື່ອແຍກເອົາທາດຂ້ອນຈົມຢູ່ໃນທາດປະສົມແຫລວນັ້ນໄດ້ຢ່າງໄວວາ. ເພື່ອຈະເຮັດໃຫ້ ວີຣຸດ ຈົມຂ້ອນລົງນັ້ນຈະຕ້ອງໃຊ້ເຄື່ອງແຍກສູນພິເສດ, ແລະເຄື່ອນໄຫວໂດຍອາໃສຄວາມກົດດັນຂອງອາກາດ, ປິ່ນໃນລະດັບຫົກສິບພັນຮອບຕໍ່ຫນຶ່ງນາທີ. ຫມາກຜົນແຫ່ງການຊອກຄົ້ນເກືອງສິ່ງປາບົດພິດສະດານນີ້ມັນເປັນເຊັ່ນນັ້ນແລ້ວ...

ໂດບີ ມອດເຄື່ອງຈັກແລ້ວຊີ້ໃຫ້ຂ້າພະເຈົ້າເບິ່ງບັນດາຫລອດແກ້ວທີ່ໄດ້ຖືກອັດໄວ້ແຈບໆແລ້ວແລະວາງເປັນແຖວຢູ່ຢ່າງສະໝໍ່າສະເຫມີເທິງໂຮງບັນຈຸທີ່ຕັ້ງຢູ່ເທິງໂຕະນັ້ນ.

- ນີ້ ເຊນຸຍແອນ, ຕໍ່ຫນ້າຂອງເຈົ້າແມ່ນບັນດາວີຣຸດທຸກໆຊະນິດທີ່ທາງວິທະຍາສາດໄດ້ຮູ້ໂຕມັນແລ້ວ, ພວກມັນຖືກແຍກອອກມາໃນຮູບບໍລິສຸດ, ນີ້, ທາດແຫລວສີບົວນີ້ທີ່ມີບັນດາຢາງກອກໃສນ້ອຍໆ ຈົມລົງນັ້ນ ແມ່ນວີຣຸດພະຍາດກະດັນຕາບົ້ງຂອງມັນຝະລັ່ງ, ນີ້ແມ່ນວີຣຸດ ທີ່ເຮັດໃຫ້ໃບມັນຝະລັ່ງຫົດເຂົ້າ, ນີ້ແມ່ນວີຣຸດກໍ່ໃຫ້ເກີດພະຍາດກະດັນແກ່ຫມາກເຂືອສົ້ມ. ນີ້ແມ່ນວີຣຸດທີ່ກໍ່ໃຫ້ເກີດພະຍາດເຕ້ຍແກ່ຕົ້ນໄມ້ກິນຫມາກ. ຢູ່ຍີ່ປຸ່ນ ເຂົາເຈົ້າສາມາດປູກຕົ້ນເຊີຣີນ້ອຍໆ, ງາມໆແລະຈັບໃຈຂຶ້ນມາໄດ້. ຄວາມລັບຂອງການປູກຕົ້ນໄມ້ເຕ້ຍນີ້ ຊາວສວນຜູ້ຫນຶ່ງໄດ້ຊົມບອກໃຫ້ແກ່ລູກຊາຍກົກຂອງຕົນ ກ່ອນທີ່ຈະຂາດໃຈຕາຍ ພໍປານວ່າແມ່ນຄວາມເລິກລັບອັນໃຫຍ່ຫລວງນີ້ແຫລະ. ແຕ່ຂ້ອຍຮູ້ດີ. ເຂົາບອກໃຫ້ລູກຮູ້ຈັກວິທີສີດເຊື້ອ

ວິຣຸດ. ເຈົ້າຈົ່ງເບິ່ງບັນດາທາດແຫລວທີ່ມີຫລາຍສີສັນນີ້ ແລະບັນດາຢາງກອກໃສນັ້ນຢ່າງລະອຽດລະອໍ່ດູ. ໃນຫລອດແກ້ວນີ້ ແມ່ນວິຣຸດ ອາບເຕີ. ໃນອັນນີ້ແມ່ນວິຣຸດຫວັດ. ຂ້ອຍເສຍເວລາຍ້ອນພວກມັນຫລາຍພໍຄວນ. ພວກເຫງັນເປັນສັດທີ່ສຳພັດກັບພະຍາດຫວັດໄດ້ໄວທີ່ສຸດ. ວິຣຸດຫວັດມັກເລືອດເຫງັນທີ່ສຸດ. ຢູ່ນີ້ສາມາດເກັບທ້ອນປະລິມານວິຣຸດ ໄດ້ກ້ອນໃຫຍ່ສົມຄວນ ແລະດ້ວຍປະລິມານ ວິຣຸດໃນຫລອດແກ້ວນີ້ເທົ່ານັ້ນກໍພໍແລ້ວທີ່ຈະເຮັດໃຫ້ມວນມະນຸດທັງຫມົດໃນໂລກຫນ່ວຍນີ້ໄອແລະຈາມພັດຈາມພີ່ກັນໄປຫມົດທຸກຄົນ.

- ສີຫນ້າງຫມາກກັງງນີ້ງາມຫລາຍເນາະ! - ຂ້າພະເຈົ້າຫັນໄປສົນໃຈຫລອດແກ້ວໂຕອື່ນ.

- ງາມ, - ໂດບີເວົ້າ, ແລະເອົາຫລອດແກ້ວນ້ອຍອັນຫນຶ່ງອອກມາຈາກໂຮງບົນຈຸ. - ຢູ່ໃນນີ້ແມ່ນ ວິຣຸດຂີ້ກະດູດ. ແມ່ນແລ້ວ, ພວກຂີ້ກະດູດທີ່ທຳມະດາສາມັນທີ່ສຸດກໍແມ່ນ ວິຣຸດພິເສດຊະນິດຫນຶ່ງເປັນຜູ້ກໍ່ຂຶ້ນ. ແລະກ້າມັນຫາກປົ່ງຂຶ້ນມາໃນອຸ້ງມືຂອງເຈົ້າແລ້ວກໍຕ້ອງສະເຫນີໃຫ້ທ່ານຫມໍຈູດມັນໄປດ້ວຍອາຊິດນິຕຣິກ. ສ່ວນອັນນີ້ແມ່ນ ບັນດາຢາງກອກໃສຂອງວິຣຸດທີ່ມີສີສັນຄືກັນ, ແຕ່ພວກມັນບໍ່ໄດ້ກໍ່ໃຫ້ເກີດຂີ້ກະດູດຂຶ້ນບົນຜິວຫນັງ, ແຕ່ມັນກໍ່ໃຫ້ເກີດພະຍາດຫມາກໃສຂຶ້ນມາ. ເຈົ້າເຄີຍໄດ້ຍິນເຂົາເຈົ້າເຄີຍເວົ້າວ່າ: "ຣິມສົບໂປຂຶ້ນ" ແດ່ບໍ? ນັ້ນມັນແມ່ນຕຸ່ມໂພງຕ່າງໆເທົ່ານັ້ນ, ແຕ່ກໍແມ່ນພະຍາດຊະນິດຫນຶ່ງເຊິ່ງແມ່ນວິຣຸດ ...

- ຄັນຊັ້ນ ແມ່ພະຍາດເປັນຈັ່ງໃດລະ? - ຂ້າພະເຈົ້າຖາມດ້ວຍຄວາມຮ້ອນໃຈຢາກຊອກຮູ້ຮ່ຳຮຽນ.

ໂດບີ ຍິ້ມຫົວຢ່າງມີຄວາມຫມາຍ.

- ເປັນຄຳຖາມຫນຶ່ງທີ່ສອດຄ່ອງທີ່ສຸດ. ຂ້ອຍກໍເຄີຍຕັ້ງຄຳຖາມນັ້ນກັບຕົນເອງມາແລ້ວໃນຄາວທີ່ຍັງເປັນທ່ານຫມໍຫນຸ່ມຢູ່, ແລະຂະນະທີ່ພວມເລີ່ມທຳການຄົ້ນຄ້ວາພະຍາດໄຂ້ຫມາກແດງຢູ່ພຸ້ນ. ໃນໂມງຮຽນ, ເຂົາເຈົ້າສອນຂ້ອຍວ່າ ບໍ່ມີພະຍາດຕິດແປດຊະນິດໃດທີ່ຈະບໍ່ເກີດຂຶ້ນມາຈາກແມ່ພະຍາດ. ປາສະເຕີ ເປັນຜູ້ຄົ້ນພົບແມ່ພະຍາດ, ລາວຊ້ຳມາປະເຊີນກັບວິຣຸດຂອງໂລກວໍ້. ກົກ ກໍໄດ້ຄົ້ນພົບເຊື້ອໂລກອະຫິວາແລະເຊື້ອວັນນະໂລກ. ແຕ່ຜູ້ສືບທອດຂອງເພິ່ນບໍ່ສາມາດຊອກເຫັນແມ່ພະຍາດທີ່ເປັນຕົວການກໍ່ໃຫ້ເກີດພະຍາດຂຶ້ນມາ ເປັນລວາດໆນັ້ນໄດ້. ປະຈຸບັນນີ້ພວກເຮົາຮູ້ວ່າພະຍາດຈຳນວນຫນຶ່ງແມ່ນແມ່ພະຍາດເປັນຜູ້ກໍ່ຂຶ້ນ, ສ່ວນພະ

ຍາດຈຳນວນຫນຶ່ງນັ້ນຊ້ຳແມ່ນວິຣຸດເປັນຕົ້ນເຫດ. - ໃບຫນ້າຂອງ ໂດບີ ຊື່ນບານຂຶ້ນມາ. - - ແລ້ວທຸກຄົນກໍຈະຮູ້ວ່າ ການຄົ້ນຄ້ວາກ່ຽວກັບ ວິຣຸດກໍມີຄວາມສຳຄັນທີ່ສຸດຕໍ່ຂະແຫນງວິທະຍາສາດ, ບໍ່ຕ່າງຫຍັງກັບຈຸລະຊີວະວິທະຍານີ້ແຫລະ.

- ໂອ໋, ທ່ານ! - ຂ້າພະເຈົ້າຫລຸດປາກອອກມາເພາະງຶດງໍ້ຍຳເກງ. ຫນ້າເສຍດາຍທີ່ສຸດວ່າຢູ່ທີ່ວິທະຍາໄລ ເຂົາເຈົ້າບໍ່ໄດ້ເວົ້າເລື່ອງເຫລົ່ານີ້ກັບພວກຂ້າພະເຈົ້າຈັກຫນ້ອຍເລີຍ! ແຕ່ຖ້າທ່ານຫາກຮັກສາວັດຖຸທີ່ແສນອັນຕະລາຍຮ້າຍກາດນັ້ນໄວ້ໃນຫລອດແກ້ວເຊັ່ນນັ້ນ, ແລ້ວ...

ໂດບີ ຍິ້ມ.

- ວິຣຸດ ມັນເປັນຫນ້າຢ້ານ ເມື່ອມັນຢູ່ໃນມືຂອງຄົນໂງ່ງ່າວເທົ່ານັ້ນ, ແຕ່ມັນບໍ່ແມ່ນຢູ່ໃນຫ້ອງທົດລອງຂອງນັກທົດລອງຕົວຈິງ. ນັກທົດລອງຕົວຈິງນັ້ນ ຈະຮຽນວິທີບັນຊາມັນແລະດັດສ້າງມັນ...

- ດັດສ້າງມັນແບບໃດລະ? - ຂ້າພະເຈົ້າຖາມ.

- ແລ້ວເຈົ້າຊິຮູ້ແຈ້ງດອກ. ຮ່າງກາຍຫນຶ່ງທີ່ມີຊີວິດຈະມີປະຕິກິລິຍາຫລາຍຢ່າງຕ່າງກັນຕໍ່ການນຳເອົາປະລິມານທີ່ຈຳເປັນໃດຫນຶ່ງຂອງທາດ ໂປຣຕີນ ທີ່ແປກຕ່າງເຂົ້າສູ່ຮ່າງກາຍນັ້ນ. ບັນຫາສຳຄັນແມ່ນຮ່າງກາຍຈະຜະລິດທາດປໍລະປັກອອກມາຕ້ານກັບທາດໂປຣຕີນທີ່ຖືກນຳເຂົ້າໄປນັ້ນ. ທ່ານ ມິນໂຮຍເຊີ ຂອງເຈົ້າຄ້ວາເອົາເງິນມາໄດ້ກໍແມ່ນອາໃສການຫາວິທີເອົາບັນດາທາດທີ່ຕ້ານກັບພິດເບື່ອຂອງງູນັ້ນໄດ້. ບັນດາພະນັກງານທົດລອງຂອງເພິ່ນໄດ້ສີດພິດງູເຫົ່າດ້ວຍປະລິມານຈຳກັດຈຳນວນນ້ອຍໆຫນຶ່ງໃສ່ມ້າຫລືພວກແກະ, ຫລັງຈາກນັ້ນກໍແຍກທາດປໍລະປັກທີ່ຖືກຜະລິດອອກມາໃນເລືອດມ້ານັ້ນອອກ; ນັ້ນຄືຢາແກ້ທາດຕ້ານພິດງູເຫົ່າຕອດນັ້ນເອງ. ຕໍ່ແມ່ພະຍາດໂລກຄໍຕີບເຂົາເຈົ້າກໍເຮັດເຊັ່ນນັ້ນ, ແລ້ວກໍສາມາດກັ່ນເອົາເລືອດຕ້ານພະຍາດຄໍຕີບໄດ້.

- ທ່ານ, ຄັນຊັ້ນມັນກໍງ່າຍດາຍດອກຕິ! ຈັ່ງຊັ້ນເຮົາຈະຕ້ອງຕ້ານກັບທຸກໆພະຍາດດ້ວຍວິທີດັ່ງກ່າວນີ້.

- ເອີ... ເຈົ້າຮ່າວເວົ້າວ່າ... ງ່າຍດາຍ... - ໂດບີແກວ່ງຫົວ, ປານກັບວ່າເພິ່ນສົມເພດໃນຄວາມໂງ່ງ່າວຂອງຂ້າພະເຈົ້າ. - ແຕ່ມັນບໍ່ໄດ້ງ່າຍຈັກດີ້ເລີຍ. ຕໍ່ແຕ່ລະເຊື້ອພະຍາດຕິດ

ແປດນັ້ນ ກໍຈະຕ້ອງເລືອກເອົາພັນສັດຊະນິດໃດຊະນິດໜຶ່ງທີ່ເໝາະສົມທີ່ສຸດ. ຕໍ່ພະຍາດຄໍຕີບເຂົາເຈົ້າໄດ້ເລືອກເອົາມ້າຕໍ່ວິຮຸດຂອງພະຍາດໝາກສຸກ ນັ້ນແມ່ນງົວນ້ອຍ. ຕໍ່ວິຮຸດຫວັດ ...

- ເຫັນ, - ຂ້າພະເຈົ້າຍ້ຳຄືນເພື່ອໃຫ້ເພິ່ນຮູ້ວ່າຕົນເຂົ້າໃຈດີ.

- ເຊມຸຍແອນ, ເຈົ້າກ້າວໜ້າເສີນຄວນ, - ໂດບີຫົວ. ແລະຈັກໜ້ອຍເຈົ້າຫາກຈະເຫັນດອກ, ກໍແມ່ນດ້ວຍວິທີການທົດລອງອັນດຽວກັນນັ້ນແຫລະ ຈະສາມາດໝູນໃຊ້ເຂົາໃນວງກອື່ນໄດ້.

ໂດບີ ຍ່າງໄປທີ່ໂຕະທົດລອງ, ຢູ່ເທິງໂຕະນັ້ນມີຕົ້ນໄມ້ສອງຕົ້ນຕັ້ງໄວ້.

- ນີ້ແມ່ນຕົ້ນໄມ້ທີ່ເປັນເຄືອຍາດດຽວກັນກັບມັນຝະລັ່ງ, - ເພິ່ນເວົ້າ, - ມັນມີສາຍສຳພັນທາງດ້ານເຊື້ອຊາດຍາດວົງກັບມັນຝະລັ່ງ. ໜຶ່ງໃນສອງກົກນີ້ ຕິດພະຍາດວິຮຸດກະດັນຕາບົ້ງ. ຈະຕ້ອງຈຳແນກສອງກົກນີ້ວ່າ ຕົ້ນໃດເປັນພະຍາດ, ຕົ້ນໃດຍັງແຂງແຮງດີຢູ່ ...

ຂ້າພະເຈົ້າຕອບໄປຢ່າງບໍ່ໄດ້ຄຶດຫຍັງເລີຍ.

- ຕ້ອງແຫກລຳຂອງມັນອອກແລ້ວເບິ່ງວ່າມັນຝຸໄປບໍ່.

ໂດບີ ທຸບຝາມືລົງໃສ່ໂຕະ.

- ທຳອິດ, ມັນຈະບໍ່ຝຸໄປໃນທັນທີໂລດ. ຄັນຊັ້ນກ້າເຈົ້າປູກຕົ້ນໄມ້ອຸດສາຫະກຳຊະນິດນີ້ເຕັມຢູ່ຕັ້ງຫ້າພັນໄຮ່ ເດລະ? ຈັ່ງໃດລະ, ເຈົ້າກໍຈະໄປແຫກເບິ່ງແຕ່ລະກົກຫວະ?

- ທ່ານ, ຂ້າພະເຈົ້າຫາວເວົ້າໄປໂດຍບໍ່ຄຶດໜ້າຄຶດຫລັງ.

- ຫັ້ນແຫລະ, - ໂດບີ ຜ່ອນສຽງ. - ເອີ ...

ເພິ່ນເອົາແກ້ວແຜ່ນໜຶ່ງອອກມາທັນທີ, ແລ້ວບິດເອົາໃບຂອງຕົ້ນທີ່ໜຶ່ງແລ້ວບີບເອົານ້ຳຂອງມັນລົງໃສ່ແກ້ວຍາດໜຶ່ງ. ເພິ່ນເຂົ້າໄປໃນຫ້ອງ, ລ້າງມືດ້ວຍສະບູແລ້ວ, ຈາກນັ້ນກໍບິດເອົາໃບໃນຕົ້ນທີ່ສອງແລະບີບເອົານ້ຳລົງໃສ່ແກ້ວນັ້ນຍາດໜຶ່ງ, ແປະກັບຍາດທຳອິດໂດຍທີ່ພວກມັນລົວະໃສ່ກັນໄດ້.

- ເຊມຸຍແອນ, ແນມເບິ່ງນີ້, ນ້ຳສອງຍາດນີ້ຄືກັນດີ? ທັງສອງຍາດລ້ວນແຕ່ໃສດີແມ່ນບໍ່?

-ແມ່ນແລ້ວ ທ່ານ ເບິ່ງມັນແລ້ວບໍ່ສາມາດຈຳແນກໄດ້ເລີຍ.

-ໄດ້ແລ້ວ, ບາດນີ້, ເຈົ້າເບິ່ງເດີ, ຂ້ອຍຈະເອົາຊີແລັງສີດຢາອັນນີ້. ໃນນີ້ບັນຈຸເລືອດກັ່ນຂອງກະຕ່າຍ ເຊິ່ງຂ້ອຍໄດ້ສີດເຊື້ອວິຣຸດເຂົ້າໃສ່ຫລາຍເທື່ອແລ້ວ. ມີຫຍັງເກີດຂຶ້ນກັບເລືອດກະຕ່າຍຂອງພວກເຮົາແລ້ວ.

-ທ່ານ, ມັນມີທາດພິເສດອັນຫນຶ່ງເກີດຂຶ້ນ. -ຂ້າພະເຈົ້າຄ່ອຍໆເວົ້າຢ່າງບໍ່ແນ່ໃຈ.

-ແມ່ນແລ້ວ, -ໂດບີສະຫນັບສະຫນູນ, -ບາດນັ້ນຫາກໃຫ້ມັນສຳພັດກັບວິຣຸດຊະນິດນີ້ແລ້ວ ມັນຈະກໍ່ໃຫ້ເກີດປະຕິກິລິຍາອັນແນ່ນອນຂຶ້ນ. ປະຕິກິລິຍາຫຍັງ? ແລ້ວເຈົ້າຫາກຈະເຫັນ. ເບິ່ງເດີ.

ເພິ່ນຢາດເລືອດກັ່ນກະຕ່າຍອອກມາຈາກຊີແລັງລົງໃສ່ຍອດນ້ຳທີ່ຫນຶ່ງນັ້ນດ້ວຍຄວາມລະມັດລະວັງນ້ຳຢາດນັ້ນໃຫຍ່ຂຶ້ນແຕ່ຍັງໃສຢູ່ຄືເກົ່າ.

-ບາດນີ້ຮອດຢາດທີ່ສອງ, ເຊມຸຍແອນ...

ພໍເລືອດກັ່ນຫາກໍເສືອມເຂົ້າໃນນ້ຳຫນີບໃບໄມ້ຢົດທີ່ສອງເທົ່ານັ້ນ, ມັນກໍຂຸ່ນຂຶ້ນມາກັບຫມ້ອງໂລດ, ປານກັບວ່າ ເຂົາເຈົ້າຢາດນ້ຳນົມລົງໃສ່ເອົາໂລດ.

-ຄັກຫລາຍ! -ຂ້າພະເຈົ້າພຶມພຳ. -ຫມາຍຄວາມວ່າ...

-ຫມາຍຄວາມວ່າຕົ້ນທີ່ຫນຶ່ງແຂງແຮງດີ, ສ່ວນຕົ້ນທີ່ສອງນັ້ນເປັນພະຍາດແລ້ວ, -ໂດບີ ເວົ້າຢ່າງເອົາການເອົາງານ. -ກະຕ່າຍໄດ້ສ້າງທາດອັນຫນຶ່ງຂຶ້ນມາໃນຮ່າງກາຍຂອງມັນເຊິ່ງເຂົາເຈົ້າເອີ້ນກັນວ່າທາດອາກລຸຍຕີນ ທີ່ມີຄຸນນະພາບເຮັດໃຫ້ເຊື້ອຕິດແປດຂຸ້ນແລະຕິດແຫນັ້ນເຂົ້າ. ຕໍ່ຄືນ ກໍໃຊ້ວິທີການດັ່ງກ່າວ, ເຂົາເຈົ້າສາມາດຮູ້ໄດ້ວ່າມັນຕິດພະຍາດໄຂ້ຮາກສາດຫລືບໍ່.

ຈິດໃຈຂອງຂ້າພະເຈົ້າພວມຕົກຢູ່ໃນສະພາບກືກກະຕຸ້ນ, ແຕ່ມັນຍັງກືກກະຕຸ້ນແຮງກວ່າເກົ່າເມື່ອໂດບີ ເວົ້າ:

-ເຈົ້າຄືຊິເຂົ້າໃຈແລ້ວຕີ? ແມ່ນບໍ່? ໄດ້ແລ້ວ, ບັດນີ້ເຈົ້າລອງທຳການທົດລອງເອງເບິ່ງ...

ຂ້າພະເຈົ້າມີສົ່ນທົດໆທາງໆ ເມື່ອກຳເອົາປ່ຽງແກ້ວທີ່ມີວັດຖຸທົດລອງນັ້ນ. ການທົດລອງຂອງຂ້າພະເຈົ້າສຳເລັດຜົນ. ໂດບີ ກ່າວຊົມເຊີຍຂຶ້ນວ່າ:

- ດີຫລາຍ. ແຕ່ນີ້ໄປ ແຕ່ລະມື້ເຈົ້າຕ້ອງຂຶ້ນມານີ້ເພື່ອກວດກາເບິ່ງເລືອດກັ່ນຂອງບັນດາສັດລ້ຽງຂອງພວກເຮົາພາຍໃຕ້ການຕິດຕາມຂອງຂ້ອຍ. ຂ້ອຍໄດ້ສົ່ງບັນດາເຊື້ອວິຣຸດຊະນິດຕ່າງໆເຂົ້າໃນຮ່າງກາຍຂອງມັນແລ້ວ, ແລະຈະຕ້ອງສັງເກດເບິ່ງຫມາກຜົນຂອງມັນ, ຂ້ອຍຈະຕ້ອງຊອກຫາເວລາຫວ່າງເພື່ອຂຽນປຶ້ມຄົ້ນຄ້ວາ. ເຊມຸຍແອນເອີຍ, ມັນຈະເປັນປຶ້ມທີ່ມີປະໂຫຍດເຫລັ້ມຫນຶ່ງ.

- ໂອ, ທ່ານ, ຂ້າພະເຈົ້າຫມັ້ນໃຈວ່າຈະເປັນເຊັ່ນນັ້ນ, - ຂ້າພະເຈົ້າເວົ້າແລະແນມເບິ່ງໂດບີດ້ວຍຄວາມປິຕິຊົມຊື່ນ.

ເປັນອັນວ່າຂ້າພະເຈົ້າໄດ້ເລີ່ມເຮັດວຽກຢູ່ຄຽງຂ້າງກັບ ໂດບີໃນຫ້ອງທົດລອງ. ເພິ່ນສອນໃຫ້ຂ້າພະເຈົ້າຮູ້ຈັກວິທີເອົາເລືອດຈາກສັດທົດລອງ, ວິທີໃຊ້ເຄື່ອງແຍກສູນເພື່ອແຍກເລືອດກັ່ນອອກຈາກບັນດາເມັດເລືອດແດງ, ແລະຂ້າພະເຈົ້າກໍເລີ່ມຄິດວ່າຕົນມີຄວາມຮູ້ຫລາຍທີ່ສຸດແລ້ວ.

ໂດບີ ປິ່ນປົວຂ້າພະເຈົ້າໃຫ້ເຊົາຈາກພະຍາດຂາດເລືອດ, ເຊິ່ງແມ່ນຫມາກຜົນຊະນິດຮ້າຍແຮງຂອງພະຍາດໄຂ້ຫມາກເຫລືອງ, ແລະຂ້າພະເຈົ້າກໍຮູ້ສຶກຮັກຊີວິດທີ່ສຸດ. ໃນຂະນະທີ່ມີຄວາມປິ້ມອົກປິ້ມໃຈຢ່າງໃຫຍ່ຫລວງນັ້ນ ຂ້າພະເຈົ້າໄດ້ເລົ່າບາງເລື່ອງທີ່ເກີດຂຶ້ນໃນລະຫວ່າງການທ່ອງທ່ຽວພະຈົນໄພຂອງຂ້າພະເຈົ້າສູ່ ໂດບີ ຟັງແລະຢຸດຢູ່ໃນຕອນທີ່ດຳລົງຊີວິດຢູ່ອິນເດຍ ແລະພະມ້າ. ຂ້າພະເຈົ້າບໍ່ກ້າທີ່ຈະເອີ່ຍເຖິງເລື່ອງເທິງເວທີສະແດງແລະມາຊາດລານ. ໂທ້ເອີຍ, ທ່ານສາດສະດາຈານ ໂຮນເຊີ ຜູ້ເຄາະຮ້າຍນັ້ນ!... ກະທັ້ງບັດນີ້ ຂ້າພະເຈົ້າກໍຍັງຮູ້ສຶກຊ້ຳໃຈຢູ່ເມື່ອຄິດເຖິງເພິ່ນ.

ມີເທື່ອຫນຶ່ງ, ໃນຕອນກິນເຂົ້າທ່ຽງ ຂ້າພະເຈົ້າໄດ້ຖາມໂດບີວ່າ ເປັນຫຍັງເພິ່ນຈຶ່ງບິນຂຶ້ນມານີ້, ບິນຂຶ້ນມາຢູ່ດິນຕອນຫນຶ່ງເທິງດອຍກຸຫລາບຄູ່ນີ້. ໂດບີ ງຽບໄປດົນເຕີບ, ແລະຂ້າພະເຈົ້າກໍຄິດວ່າເພິ່ນຄືຊິບໍ່ຢາກຕອບ. ແຕ່ເພິ່ນແນມເບິ່ງຂ້າພະເຈົ້າດ້ວຍຄວາມໂສກເສົ້າແລ້ວເວົ້າ:



-ເຊນຸຍແອນເອີຍ, ເຈົ້າລືມສັນຍາອີກແລ້ວ. ແຕ່ເຖິງຈັ່ງໃດແຫ່ງນີ້ກໍໄດ້ກ່ຽວພັນກັບເທບນິຍາຍບູຮານທີ່ຂ້ອຍມັກທີ່ສຸດເລື່ອງຫນຶ່ງ. ແຕ່ກີ້ ແຕ່ກ່ອນ ເທິງດິນຕອນນີ້ ກູປີດົງ ໄດ້ມອບດອກກຸຫລາບຄູ່ຫນຶ່ງເພື່ອເປັນຂອງຂວັນໃຫ້ແກ່ ກາກໂປກຣາດ, ເຊິ່ງແມ່ນເຈົ້າພໍ່ແຫ່ງຄວາມມິດງຽບ, ເພື່ອບໍ່ໃຫ້ພະອົງເອີ່ຍເຖິງເກມຫລິ້ນຂີ້ດີ້ຂອງເທວະເທບທັງຫລາຍສູ່ໃຜຟັງ. ແຕ່ກາກໂປກຣາດກັບໂມໂຫຂຶ້ນ ແລະກຶ້ມດອກກຸຫລາບທັງຄູ່ນັ້ນລົງເຫວ. ກຸຫລາບສອງດອກນັ້ນຕົກລົງ, ແຂງກະດ້າງແລ້ວກາຍເປັນຫີນໄປ... ດອກກຸຫລາບ, ເຊນຸຍແອນເອີຍ, ຄືສັນຍາລັກຂອງຄວາມມິດງຽບ, ກີບດອກຂອງມັນລ້ວນແຕ່ງັບແຈບໆຢູ່ຄືຮີມສົບທັງຄູ່ທີ່ບໍ່ຢາກແຍ້ມຄວາມລັບອອກມາ. ເມື່ອຍັງບໍ່ທັນຫມົດກຳນົດຂອງສັນຍານີ້ ເຈົ້າຈົ່ງຄິດເຖິງດອກກຸຫລາບແລ້ວງຽບຢູ່...

ມື້ນັ້ນ ໂດບີ ມີວາດຄົນຄຶດຕຶກຕອງ, ໂສກເສົ້າ ແລະປະກົດຄືກັບວ່າມີຄວາມເຈັບຊ້ຳ.

ຕອນບ່າຍ, ຂ້າພະເຈົ້າໄປທີ່ຂ້າງຮົ້ວເຫລັກ ເພື່ອແຍງເບິ່ງຜາກຸຫລາບຄູ່, ແຕ່ຂ້າພະເຈົ້າຕ້ອງສັກຄະໂຍງກອຍຫລັງຄືນທັນທີ. ເທິງທາງຍ່າງ, ຢູ່ຂ້າງຜາເບື້ອງລຸ່ມນັ້ນ ມີຄົນຜູ້ຫນຶ່ງພວມໃຊ້ກ້ອງສ່ອງແນມມາທີ່ຄະລືຫາດຂອງໂດບີ ດ້ວຍຄວາມຈົດຈໍ່.

## ໑໙
## ຕອນທີເກົາ

### I

ເປັນອັນວ່າລະດູຫນາວໄດ້ລ່ວງເລີຍໄປ. ຄວາມຄິດເຖິງບ້ານນັບມື້ນັບເກາະກ່ຽວຫນ່ວງໃຈຂຶ້ນມາ. ໃນທີ່ສຸດ ມື້ຫນຶ່ງຕອນເຊົ້າຂອງລະດູບານໃຫມ່ນັ້ນ ຂ້າພະເຈົ້າກໍເກີດຈິດດວ່ໃຈວອນຢາກຈະກັບຄືນໄປເພື່ອເຫັນຫນ້າພໍ່ຜູ້ບັງເກີດເກົ້າ, ລູງແລະເອດີວິນເທ, ເຖິງແມ່ນມັນຈະເປັນພຽງຊົ່ວຍິບຍາມກໍຕາມ. ຂ້າພະເຈົ້າບໍ່ອາດຈະຫັກຫ້າມຫົວໃຈຂອງຕົນໄວ້ໄດ້ອີກແລ້ວ ແຕ່ກໍຕັດສິນໃຈຮັກສາສັນຍາກັບ ໂດບີໄວ້ຢ່າງຫມັ້ນແກ່ນ, ຄືເມື່ອໄປຮອດ ແອຊູໂອເອີແລ້ວກໍຈະບໍ່ແຍ້ມປາກເພື່ອສິ່ງໃດໆອອກມາຕໍ່ໃຜທັງນັ້ນ. ຂ້າພະເຈົ້າພຽງແຕ່ຈະຢືນຢູ່ໄກໆ ແນມເບິ່ງເຮືອນຫລັງນ້ອຍໆຂອງພໍ່. ເບິ່ງ ເອດີ ຄາວຫນຶ່ງເທົ່ານັ້ນແລ້ວກໍຈະກັບຄືນມາໂລດ. ພໍດີມັນ

ກໍເປັນເວລາທີ່ໂອກາດອຳນວຍໃຫ້ແກ່ການລັກໂຕນໄປ, ຄື ໂດບີ ອັດປະຕູໄວ້ແຈບໆແລ້ວນັ່ງເຮັດວຽກຢູ່ຊັ້ນເທິງແລະບອກໄວ້ວ່າ ເພິ່ນພວມວຸ້ນນຳການກ່າຍຮ່າງບົດຄົ້ນຄ້ວາຄືນແລະຈະບໍ່ລົງມາກິນອາຫານທ່ຽງ. ສ່ວນລູງ ມິກລີ ກໍພວມຫຍຸ້ງນຳວຽກຢູ່ທາງເຮືອນຄົວພຸ້ນ. ຂ້າພະເຈົ້າເລີຍທຳທ່າເວົ້າກັບລາວວ່າຈະເຮັດວຽກຢູ່ໃນຫ້ອງລ້ຽງສັດ ແລະຫວັງວ່າລູງຈະບໍ່ໄປລົບກວນຂ້າພະເຈົ້າ. ເວົ້າແທ້ແລ້ວອີ່ລູງມິກລີນີ້ ລາວຕັ້ງມີນິດໄສອຸບາດອີ່ຫລີ: ບັງເອີນລາວເລີຍບໍລໍຫົວເຂົ້າໃນສາງ, ພຶມພຳອີ່ສັງສອງສາມຄວາມຢູ່ໃນປາກແລ້ວກໍຫາຍລັບໄປ.

ຂ້າພະເຈົ້າຍ່າງຂ້າມປະຕູຮົ້ວໄປຢ່າງຫວາດຫວັ່ນສັ່ນເຊັນ.

ຍ່າງໄປຕາມເສັ້ນທາງສາຍນ້ອຍໆເຊິ່ງຂ້າພະເຈົ້າເຄີຍຮູ້ມັນດີມາແຕ່ຄາວຍັງນ້ອຍນັ້ນ, ຂ້າພະເຈົ້າຟ້າວລົງພູມຸ່ງໜ້າກັບສູ່ ແອຊໂອເຣີ. ໄປແບບນີ້ດີກ່ວາ, ຂ້າພະເຈົ້າກະຕືລືລົ້ນແລະຊື່ນບານສຳລານໃຈຄືກັບນົກໂຕຫນຶ່ງທີ່ບຸອອກຈາກຕຸ້ມມາໄດ້. ປະກົດຄືຈັ່ງວ່າກໍແມ່ນມື້ວານນີ້ເອງທີ່ຂ້າພະເຈົ້າພ້ອມດ້ວຍບັກນ້ອຍແອເດີ ແລະພວກເພື່ອນໆສຳຮານປານດຽວກັນໄດ້ແລ່ນໄປຕາມສັນພູເຫລົ່ານີ້, ແລ້ວລົງໄປຕາມຄ້ອຍທີ່ມີຕົ້ນໄມ້ເກື່ອນປົ່ງຮົກດົກຫນາຢູ່ນີ້. ກໍແມ່ນໃນແຫ່ງນີ້ເອງທີ່ຄວາມໄຝ່ຝັນຢາກຈະໄປທ່ຽວທົ່ວທຸກມຸມໂລກໄດ້ເກີດຂຶ້ນແກ່ຂ້າພະເຈົ້າ. ໂອ້, ການທ່ຽວທັດສະນາຈອນຮອບໂລກທີ່ຂ້າພະເຈົ້າຄິດພໍ້ໃນຄາວນັ້ນ ມັນແສນສວຍງາມບໍ່ຈັກວ່າເທົ່າໃດ, ບໍ່ຕ່າງຫຍັງກັບວັນບຸນນີ້ແຫລະ, ບາດໃນຕົວຈິງແລ້ວ ມັນຊ້ຳແມ່ນການທົດສອບທີ່ດຸເດືອດຂອດຂຽວທີ່ສຸດ! ເຖິງຢ່າງນັ້ນກໍຕາມ, ຂ້າພະເຈົ້າກໍບໍ່ໄດ້ຖືເລື່ອງນີ້ເປັນສິ່ງທີ່ຫນ້າເສຍດາຍໄປດອກ. ພາຍຫລັງທີ່ໄດ້ຊີມລົດຊາດແຫ່ງຄວາມລຳບາກກາກກຳຂອງຊີວິດທີ່ບໍ່ມີຫົວຕີນປາຍນອນ, ແຕ່ພ້ອມກັນນັ້ນ, ຂ້າພະເຈົ້າໄດ້ແນມເຫັນພະລັງດຶງດູດຈິດໃຈແຫ່ງຄວາມສຳນຶກທີ່ປ່ຽນແປງໄປຕາມສະພາບແວດລ້ອມຢູ່ຢ່າງລຽນຕິດນັ້ນອີກດ້ວຍ. ຄວາມຂຽວຈັດກະດັດກະດໍ້ຂອງຊາຕາກຳຕາມປົກກະຕິແລ້ວມັນເປັນພຽງແຕ່ການຄາດຄິດເອົາຊື່ໆ. ຊາຕາກຳໄດ້ບັງຄັບໃຫ້ຂ້າພະເຈົ້າຕ້ອງຊັດເຊພະເນຈອນໄປທົ່ວສາລະທິດບົນດວງດາວພະເຄາະຫນ່ວຍນີ້, ແຕ່ເຖິງຈັ່ງໃດ ມັນກໍເຮັດໃຫ້ຂ້າພະເຈົ້າໄດ້ປະເຊີນກັບຊີວິດດ້ວຍຫລາຍຮູບແບບທີ່ແຕກຕ່າງກັນຊຶ່ງລ້ວນແຕ່ເປັນຫນ້າຈັບໃຈທີ່ສຸດ.

ຄວາມຄິດຕ່າງໆເຫລົ່ານັ້ນໄດ້ເກີດຂຶ້ນກັບຂ້າພະເຈົ້າໃນຂະນະທີ່ພວມເມົາຍ່າງເຂົ້າໄປໃກ້ໆ

ພາກຸຫລາບຄູ່ ແລະມຸ່ງຫນ້າລົງໄປຢ່າງວ່ອງໄວຕາມເສັ້ນທາງຂົດໂຂໂງ້ງງໍທີ່ຄຸ້ນເຄີຍດີມາແລ້ວນັ້ນ. ມັນກໍຍັງຄືກັບແຕ່ກ່ອນຢູ່, ເສັ້ນທາງຍັງກອງເກໄປດ້ວຍຫີນແລງນ້ອຍແລະສອງຟາກທາງກໍຕຶບຕັນໄປດ້ວຍພຸ່ມໄມ້ທີ່ພວມຕື່ນຕົວຂຶ້ນມາ ດ້ວຍແຮງກະຕຸ້ນຂອງລະດູບານໃຫມ່ແລະແສງແດດ ພາຍຫລັງທີ່ມັນໄດ້ນອນແຈບຈົມມາຕະຫລອດລະດູຫນາວແລ້ວພຸ້ນ, ຕໍ່ຕົ້ນໂອກໃຫຍ່ເກົ້າປາຍກຸດ ແລະແຫ້ມໄຟເຊິ່ງກືກໄຫມ້ຍອນຟ້າຜ່າໃນເມື່ອກ່ອນນີ້. ຢູ່ຂ້າງມັນນັ້ນແມ່ນກໍຫຍ້າທີ່ມີດອກສີອິດຊ້ຳປົ່ງຂຶ້ນມາຕາມຫວ່າງໃບທີ່ແຫ້ງຫລ່າລົງໄປເມື່ອປີກາຍນີ້ ເຊິ່ງພາໃຫ້ຂ້າພະເຈົ້າຫວນຄຶດເຖິງດວງຕາທັງຄູ່ຂອງເອດີ. ຕົ້ນໄຄດິນທັງຫລາຍຫຸ້ມກັນປົ່ງລງນວງນອ້ອມຢູ່ຕາມເປືອກໄຟໄຫມ້ດຳປີ້ງຂອງຕໍໄມ້ເກົ່າປາຍກຸດນັ້ນ. ສ່ວນພວກມົດທີ່ສີນລະວີນອິນທະການນັ້ນຊ້ຳມາສ້າງຕົວເມືອງນ້ອຍແປກປະຫລາດອັນຫນຶ່ງຂຶ້ນໃນແຫ່ງນີ້. ພວກມັນກໍ່ສ້າງກິດຈະການນີ້ມາຕັ້ງແຕ່ຍາມໃດນໍ? ແມ່ນແລ້ວທີພາແຫ່ງຄວາມເຍົາໄວຂອງຂ້າພະເຈົ້າໄດ້ຜ່ານພົ້ນໄປແລ້ວ, ມັນກອຍໄປສູ່ອະດີດອັນໄກແສນໄກໄປພ້ອມກັບຄ່ຳຄືນທີ່ມີຟ້າຝົນລົມແດງທີ່ເປັນຫນ້າສະທ້ານຢ້ານກົວນັ້ນ. ໃນຂະນະທີ່ທົ່ວທັງ ແອຊູໂອເອີ ພ້ອມກັນແຫງນຫນ້າຂຶ້ນແນມເບິ່ງຕົ້ນໂອກເກົ້າພວມລຸກໄຫມ້ເປັນໄຟຢູ່ນັ້ນ.

ນີ້ແລ້ວເດ, ພາກຸຫລາບຄູ່! ຝົນແລະລົມໄດ້ເຮັດໃຫ້ຈອມຜາໃຫຍ່ນີ້ທັງນລົງໄປ. ແນມມາແຕ່ໃກໆ, ມັນຊ່າງເຫມືອນກັບດວງດອກໄມ້ທີ່ເບັ່ງບານ. ຂ້າພະເຈົ້າເຄີຍຢືນຢູ່ແຫ່ງນີ້ເພື່ອລ່ຳແຍງທິວທັດທີ່ສວຍສະດຸດຕາສະດຸດໃຈຈົນອີ່ມບໍ່ເປັນຂອງຝັ່ງທະເລມາ ຈົນນັບເທື່ອບໍ່ໄດ້ແລ້ວ! ຢືນຢູ່ແຫ່ງນີ້ຈະສາມາດແນມເຫັນທິວທັດອັນງົດງາມແລະຄົມຊັດກ່ວາທີ່ຈະຢືນຢູ່ເທິງດອຍດຳແນມເບິ່ງ. ຕໍ່ຫນ້າຂອງຂ້າພະເຈົ້າແມ່ນມະຫາສະຫມຸດອັນກວ້າງໄກໄພສານ ແລະຄົດໂຄ້ງອັນອ່ອນນວນຊວນກະຫນອມແຫ່ງອ່າວ ແອຊູໂອເອີ. ເສົາໂຄມເຍືອງທາງເຮືອທີ່ຕັ້ງຢູ່ແຄມແຫລມ ເດີຍັງ ນັ້ນ ເບິ່ງແລ້ວມັນນ້ອຍໆສ່ຳລູກກັບຂີດອັນຫນຶ່ງທີ່ສງບລົງໃສ່ຝັ່ງທະເລໂຄ້ງເທົ່ານັ້ນ. ຢູ່ສຸດຂອບຟ້ານະພາໄກພຸ້ນ, ກຸ່ມເມກທີ່ລອຍຕ່ຳພວມເຈືອຈານຢູ່ກັບກຸ່ມຄວັນໄຟຫນາໆ. ເບື້ອງນັ້ນ, ມີກຳປັ່ນຈຳນວນຫນຶ່ງພວມເດີນທາງໄປທາງສາຍ ເອີລົບ, ອາເມລິກາ. ຢູ່ເທິງຝັ່ງເບື້ອງຂວາ, ຜ່ານມ່ານຫມອກບາງໆໃນຍາມອາລຸນອັນສົດຊື່ນແລະອົບອຸ່ນນັ້ນແມ່ນ ໂອນມາຊູນ ຊຶ່ງຕັ້ງເປັນສາຍຍາວຢຽດອອກໄປ. ຂ້າພະເຈົ້າບໍ່ສາມາດແນມເຫັນບັນດາ

ຫລັງເຮືອນນ້ອຍແລະບັນດາເຂື່ອນກັ້ນນ້ຳຢູ່ເທິງຮ່ອງໃຫຍ່ທີ່ ເວສະລີນັ້ນໄດ້-ພວກມັນກືກບິດບັງໄວ້ດ້ວຍຈອມພູ ຊາກບີ, ເສັ້ນທາງໃຕ້ດິນ ໂພມາ. ເຊື່ອແນ່ວ່າມັນຕ້ອງຍືດເຍື້ນອອກໄປທາງເບື້ອງຫລັງຂອງສັນພູຫນ່ວຍນີ້. ຫລັງຄາພາສາດທີ່ປະກົດຕົວຂຶ້ນຄືກັບເຫມືອນປ່ານສີຂີ້ເທົາອັນຫນຶ່ງພ້ອມດ້ວຍຍອດຊໍ່ຟ້າທັງສີ່ທີ່ເປັນສະຖາປະນິຍະກຳແບບຈອມແຫລມຂອງມັນ ທີ່ແນນຂຶ້ນມາຈາກຈອມດອຍທີ່ປົກຄຸມຫຸ້ມຫໍ່ຢູ່ດ້ວຍປ່າໄມ້ໄພຂຽວ, ນັ້ນແມ່ນພາສາດໂອນມາອູນ. ສ່ວນ ແອຊູໂອເອີນັ້ນຢູ່ໃກ້ໆເບື້ອງລຸ່ມຕີນຂອງຂ້າພະເຈົ້ານີ້ເອງ. ຢູ່ແຄມຝັ່ງທະເລນັ້ນແມ່ນພາບທີ່ເຄີຍເຫັນກັນມາໃນທ່າກຳປັ່ນທົ່ວໆໄປ, ເຊັ່ນດັ່ງເສົາກະໂດງເຮືອປະມົງແລະເງົາສີຂາວຂອງບັນດາໃບລົມເຮືອຊ່ວງທັງຫລາຍ. ຢູ່ເບື້ອງຊ້າຍ ທາງທ່ານ້ຳນັ້ນ ແມ່ນສາງທີ່ປຸກເປັນເຮືອນຍາວໆແລະຕ່ຳ, ມຸງດ້ວຍດິນຂໍ. ຍ່າງໄປຕາມທາງນ້ອຍນັ້ນອີກຫນ້ອຍຫນຶ່ງ ແລະເມື່ອຫວິດຈາກທາງໂຄ້ງນັ້ນໄປກໍຈະສາມາດແນມເຫັນຂົວນ້ອຍທີ່ເຕັມໄປດ້ວຍທີ່ລະນຶກ, ບ່ອນເຊິ່ງຂ້າພະເຈົ້າ ແລະເອດີໄດ້ອຳລາຈາກກັນ...

ຂ້າພະເຈົ້າຍ່າງຊ້າໆໄປຕາມກະຫນົນຂອງແອຊູໂອເອີດ້ວຍຄວາມຮັກແລະຄວາມຄາລະວະທີ່ປ່ຽມລົ້ນໃນຫມາກຫົວໃຈເມືອງເກົ່າແກ່ນີ້ ແລະໄດ້ດຶງຫມວກລົງມາບັງຫນ້າເພື່ອບໍ່ໃຫ້ໃຜຈື່ຕົນໄດ້. ທຸກສິ່ງທຸກຢ່າງຍັງຄືເກົ່າຢູ່ເທົ່ານັ້ນ. ຢູ່ຂອບປະຕູໂຮງແຮມ "ເຈົ້າສະຫມຸດ" ນັ້ນຍັງຄົງແມ່ນປ້າຍຕົກສີເຊິ່ງມີຮູບຫອກສາມງ່າມເປັນຫນ້າຍ້ານຂອງເຈົ້າສະຫມຸດແຂວນໂຕ້ນເຕັ້ນ ຢູ່ກັບບ້ວງເຫລັກຂີ້ຫມ້ຽງ. ແຕ່ປະຈຸບັນນີ້ບໍ່ເຫັນໃບຫນ້າຂອງເຈົ້າສະຫມຸດຢູ່ບ່ອນໃດໃນປ້າຍນັ້ນແລ້ວ. ມັນກືກລືບລ້າງອອກໄປຍ້ອນຫ່າຝົນທີ່ຕົກເທັ້ງລົງມາໃນຕອນລະດູໃບໄມ້ຫລົ່ນນັ້ນເອງ. ຫອກສາມງ່າມນັ້ນກໍຄືດຂຶ້ງງ້ອງແລະໂຮຍແຮງລົງໄປ. ແຕ່ກໍຄືດັ່ງທີ່ເຄີຍເຫັນກັນມາຢູ່ກ້ອງຮ້ານທີ່ມຸງດ້ວຍແພອູ່ນັ້ນ ພວກຊາວເຮືອທັງຫລາຍກໍຄືງນັ່ງຫລິ້ນຫມາກສະກາຢູ່, ກະແທກຈອກລົງໃສ່ຫນ້າໂຕະ ແລະໂອ້ລົມສົນທະນາກັນດ້ວຍຄວາມເວົ້າທີ່ສົກກະປົກລາມົກ. ທີ່ຮ້ານຂາຍຢາກໍຍັງຄົງວາງສະແດງໂຕຈີ່ໂກະແຫ້ງຢູ່ຕາມເຄີຍ, ສ່ວນກະປຸງແກ້ວບໍລິສຸດຫນ່ວຍໃຫຍ່ໆທີ່ບັນຈຸທາດແຫລວນາງສີເຫລົ່ານັ້ນ ແມ່ນຕັ້ງໂຊກັນຢູ່ອ້ອມໂຕຈີ່ໂກະທົ່ວທັງສີ່ທິດ. ຂ້າພະເຈົ້າຈື່ໄດ້ວ່າພໍ່ຄ້າລົງຊາຍຊະລາ ອົກພີ ກໍຈະໄດ້ເສດທຽນໄຂຮ້າງໄວ້ເບື້ອງຫລັງ

ຂອງກະປຸ່ງແກ້ວນັ້ນ, ແລ້ວໂຕຈີ່ໂກະກໍຈະປະກົດຕົວຂຶ້ນໃນແສງສະຫວ່າງຂຽວມືວໆຊະນິດຫນຶ່ງຢ່າງພິດສະດານ. ແລະໃຜໆກໍຮູ້ກັນໄດ້ໂລດວ່ານັ້ນແມ່ນຮ້ານຂາຍຢາ.

ເມື່ອຂ້າພະເຈົ້າຍ່າງເຂົ້າໄປໃນຮ້ານຂາຍຢານັ້ນບໍ່ເຫັນທ່ານ ອິກພີ ຢູ່ຫັ້ນເລີຍ, ມີພຽງຊາຍຫນຸ່ມຄົນຫນຶ່ງທີ່ພວມຮັບແຂກຢູ່. ອືງໃສ່ຕາທັງຄູ່ທີ່ສວດຄືຕາແກະ ແລະບັນດາຈ້ຳມຶກຢູ່ເທິງໃບຫນ້ານັ້ນ, ຂ້າພະເຈົ້າຈື່ໄດ້ວ່າ ເຂົາຄື ແອເດີ. ແຕ່ຫນ້າແປກອີ່ຫລີ, ແອເດີ ຈື່ຂ້າພະເຈົ້າບໍ່ໄດ້ເລີຍ, ເຖິງແມ່ນວ່າຍ້ອນຄວາມເຜີຕົວ, ຂ້າພະເຈົ້າໄດ້ເປີດຫມວກຂຶ້ນ ແລະແອເດີສາມາດແນມເຫັນໄດ້ຄັກ. ພວກເຮົາຍືນຢູ່ຫ່າງກັນພຽງຊິ່ວຕູ້ຂາຍຢາເທົ່ານັ້ນ. ແລະແອເດີກໍແນມເບິ່ງຫນ້າຂອງຂ້າພະເຈົ້າກົງໆດ້ວຍທ່າທາງຢຸດໆຢ່ອນໆ.

- ທ່ານ, ທ່ານຕ້ອງການຫຍັງນໍ?

- ເຈົ້າມີຢາປົວພະຍາດຫັນໃຈພຶດແດ່ບໍ່? - ຂ້າພະເຈົ້າຖາມ, ທັງກັ້ນໃຈໄວ້ເພາະຄວາມກະຕຸ້ນໃຈແລະເກງວ່າ ແອເດີ ຈະຈື່ຂ້າພະເຈົ້າໄດ້. ໃນສ່ວນຕົວຂອງຂ້າພະເຈົ້າແລ້ວ, ການແວະເຂົ້າຮ້ານຂາຍຢາແບບນີ້ມັນແມ່ນຄວາມເຜີຕົວທີ່ສຸດ. ຕ້ອງຫນີອອກຈາກນີ້, ດຽວນີ້ໂລດ.

ແອເດີ ທຳທ່າຍິ້ມແຍ້ມແຈ່ມໃສຄືກັບພວກພໍ່ຄ້າຊາວຂາຍທັງຫລາຍເຄີຍປະພຶດຕໍ່ແຂກທີ່ບໍ່ທັນລຶ້ງຫນ້າ.

- ໂອ່, ມີຢູ່... ນີ້ແມ່ນຢາເມັດ... ສ່ວນຢາຫມ່ອງນັ້ນແພງກ່ວາເລັກນ້ອຍ...

ແອເດີ ແປງກາລະວັດທີ່ຮັດຢູ່ເທິງຄໍເສື້ອສຳນຽງສຽງເວົ້າຂອງເຂົາມີວາດນຸ່ມນວນສະເທືອນໃຈຄືກັບສຽງຂອງພໍ່:

- ເອີທ່ານ, ຊິໃຫ້ຫໍ່ຫມົດທັງສອງຢ່າງນີ້ເລີຍບໍ່? ພວກເຮົາປຸງຢານີ້ຕາມໃບແນະນຳຂອງທ່ານຫມໍ ພີວດ. ໂອກາດນີ້ຂ້າພະເຈົ້າຂໍມອບບ່ອນຢູ່, ກະຫນິບຄຸ້ມແລະນາມບັດຂອງທ່ານຫມໍໃຫ້ທ່ານພ້ອມ. ເພິ່ນກໍກວດພະຍາດເປັນປະຈຳທຸກມື້.

ຂ້າພະເຈົ້າງຶກຫົວຢູ່ງຽບ ແລ້ວຈ່າຍເງິນໃຫ້. ມີໃຜຄົນຫນຶ່ງຍ່າງເຂົ້າມາໃນຮ້ານ, ເລົ່ງຫວງຊື້ພົງກາລະບູນຈົນໄດ້. ເຂົາເປັນຄົນຮ່າງນ້ອຍໃສ່ຫມວກແງັບທີ່ມີເກີ້ຍາວໆ. ເວລາຫຍັບເຂົ້າມາໃກ້ໆຕູ້ຂາຍຢານັ້ນ ເຂົາສຸຍຂ້າພະເຈົ້າໄປຢ່າງບໍ່ໄດ້ຂໍໂທດເລີຍ. ເອົາຢາເມັດແລະຢາຫມ່ອງຍັດເຂົ້າຖົງແລ້ວ, ຂ້າພະເຈົ້າກໍຟ້າວຫນີອອກໄປ.

ນີ້ເດ, ຮ້ານອາຫານ "ລາຊາເສືອ". ພວກເດັກນ້ອຍຂາຍໜັງສືພິມແລ່ນມາແຕ່ທິດກົງກັນຂ້າມກັບຂ້າພະເຈົ້າ ແລະຈ່າວຂ່າວດັ່ງຕໍ່ໄປນີ້ອຶກກະທຶກຂຶ້ນດ້ວຍຄວາມກະຕືລືລົ້ນ:

- ຄະດີລັກເພັດຂອງຍາແມ່ເຈົ້າຊຸນ ອາກຊິດ! ມີຂ່າວການໂຮມຊຸມນຸມຂອງກຳມະກອນບໍ່ກ່ານທີ່ເວລະລີ!

ຊາຍຊະລາມີກຸດຜູ້ໜຶ່ງ, ຮ່າງສູງສວມໝວກຕິກລີ ແລະນຸ່ງເສື້ອຍ່າມແບບບູຮານມາຢືນຂ້າງຂ້າພະເຈົ້າ:

- ເອ, ໜັງສືພິມ!

ເດັກນ້ອຍຜູ້ໜຶ່ງ, ນຸ່ງເຄື່ອງຂາດສ້ອຍພົມຫຍຸ້ງລຸງລັງ, ເດ່ໜັງສືພິມໃຫ້ເພິ່ນແລ້ວແລ່ນໜີໄປ. ຊາຍຊະລາໃຊ້ມືເບື້ອງທີ່ຍັງເຫລືອຢູ່ນັ້ນເປີດໜັງສືພິມອອກ, ແນມຜ່ານໆເບິ່ງໄປໃນໜ້າໜັງສືພິມເຫລົ່ານັ້ນ ແລ້ວແນມເບິ່ງຂ້າພະເຈົ້າຢ່າງເສີຍເມີຍ.

ລູງແຮັດເຍີ, ລູງ ແຮັດເຍີເດຫັ້ນ, ແບບດຽວກັນກັບ ແອເດີ, ລູງຈື່ຂ້າພະເຈົ້າບໍ່ໄດ້ເລີຍ. ຫັ້ນ, ລູງພວມຍ່າງໄປຕາມທາງຍ່າງ, ເພິ່ນພະຍາຍາມຄືງບ່າທັງສອງໃຫ້ຊື່ແລະຍືດເອິກຂຶ້ນ. ຂ້າພະເຈົ້າໄດ້ແຕ່ຄຶດຢາກຈະແລ່ນຕາມລູງໄປແລະຮ້ອງຂຶ້ນ: "ລູງທີ່ຮັກແພງເອີຍ, ຢຸດຢູ່ຫັ້ນກ່ອນ! ບັກນ້ອຍ ເຊມຸຍແອນຂອງລູງເອງນະນີ້. ເວົ້າໃຫ້ຫລານຟັງແດ່ດູວ່າພໍ່ຂອງຫລານຢູ່ກິນຈັ່ງໃດ, ເອດີເດຢູ່ກິນແນວໃດ? ສ່ວນລູງນັ້ນແລງໃດກໍຍັງມາດື່ມເຫລົ້າໝາກນາວທີ່ຮ້ານອາຫານ "ລາຊາເສືອ" ຢູ່ບໍ່? ລູງທີ່ຮັກແພງຂອງຫລານເອີຍ, ລູງຍັງມັກສາທະຍາຍອະພິປາຍບັນຫາແບບປັດຊະຍາກັບເພື່ອນຝູງຂອງລູງຢູ່ບໍ່ລະ?

ລູງຂອງຂ້າພະເຈົ້າແວະເຂົ້າຮ້ານອາຫານ, ສ່ວນຂ້າພະເຈົ້າຍ່າງກາຍຄຸ້ມທີ່ຢູ່ຂ້າງນັ້ນໄປຫາເດີ່ນຕະຫລາດເກົ່າທີ່ອຶດໄປດ້ວຍກິ່ນຄາວປາແລະຜັກເນົ່າ. ພຽງແຕ່ຍ່າງກາຍຮ້ານວາງເຄື່ອງຂາຍເຫລົ່ານັ້ນໄປເທົ່ານັ້ນ ຂ້າພະເຈົ້າກໍຈະແນມເຫັນເຮືອນຫລັງນ້ອຍໆຂອງພໍ່ທີ່ຕັ້ງຢູ່ແຈຄຸ້ມນັ້ນ. ແຕ່ໃນແຈຄຸ້ມນ້ອຍໆແລະງຽບສະຫງັດໃນເມື່ອກ່ອນ, ປະຈຸບັນນີ້ມີເຮືອນຜ້າຕັ້ງຫລັງໜຶ່ງປຸກຂຶ້ນມາພາໃຫ້ຂ້າພະເຈົ້າຄຶດເຫັນສະໄໝເປັນນັກສຶນລະປິນພະເນຈອນຂອງຕົນ. ປ້າຍໂຄສະນາແຜ່ນໜຶ່ງໄດ້ແຈ້ງເວລາສະແດງຕ່າງໆຂອງນັກຝຶກແອບສັດຮ້າຍຄົນໜຶ່ງໄວ້ຢ່າງ

ມະລຸມມຸະລ້ວຍແລະພວກເດັກນ້ອຍທັງຫລາຍ ກໍໄດ້ໄປຈຸ້ມກັນຢູ່ຂ້າງບ່ອນຂາຍປີ້ຂອງຄະນະກາຍຍະສິນພະເນຈອນນັ້ນ.

ດ້ວຍສີຫນ້າທ່າທາງອັນເຄັ່ງຂຶມ, ທ່ານຫມໍພີລິດພ້ອມດ້ວຍພວກລູກສາວຊີ້ເຮີຂອງຕົນ ກໍປະກົດວ່າພວມຈະໄປຊື້ປີ້ເບິ່ງກາຍຍະສິນ. ເຂົາເຈົ້າລຶ້ງເຄີຍກັບຂ້າພະເຈົ້າດີ. ແຕ່ແລ້ວເມື່ອມາຂະໂຫມະຫນ້າກັນຢູ່ເຊັ່ນນີ້, ເຂົາທັງສາມກໍຍັງແນມເບິ່ງຂ້າພະເຈົ້າຢ່າງເມີນເສີຍແລະເຢັນຢັງ.

ເຮືອນຫລັງນ້ອຍໆຂອງພໍ່ຂ້າພະເຈົ້າປະກົດວ່າບໍ່ມີໃຜຢູ່ແລ້ວ. ຄວັນກໍບໍ່ລອຍຂຶ້ນຈາກທໍ່ຄວັນຂອງເຮືອນຄົວ. ເທິງປ້າຍນ້ອຍໆນັ້ນສະຫລັກຊື່ເຈົ້າຂອງເຮືອນວ່າ ແຮັດເຢີນານບຣັງ ແຕ່ບໍ່ແມ່ນອາຍີດໍປີນ ອີກແລ້ວ.

- ພຸດໂທເອີຍ... ແມ່ນບໍ່ວ່າພໍ່ຂອງຂ້າພະເຈົ້າໄດ້?...

ແມ່ເກົ້າ ໂອລີວີອາ ນັ່ງກັກພິມຢູ່ເທິງພະນັກສາມຊັ້ນຫັ້ນແລະ ກໍຈື່ຂ້າພະເຈົ້າບໍ່ໄດ້ເລີຍ. ຫລືຊິໄປການແມ່ເກົ້າບໍ່? ຄັນຊັ້ນຄໍາສັນຍາເດລະ? ສັນຍາຮັບຈ້າງເດລະ? ເກິງຈັ່ງໃດ ໂດບີ ກໍເປັນຜູ້ທີ່ໄດ້ກູ້ເອົາຂ້າພະເຈົ້າອອກຈາກຄວາມຕາຍ. ຈະຕ້ອງຊື່ສັດຕໍ່ເພິ່ນ.

ຂ້າພະເຈົ້າປ່າຍມືປະຕິເສດ. ຢູ່ໃນສວນຕອນນ້ອຍໆຂອງຄອບຄົວ ວີນເທ ກໍບໍ່ມີຄົນພໍຄົນເລີຍ. ຂ້າພະເຈົ້າຄ່ອຍໆຫັນກັບໄປ, ພະຍາຍາມກັ້ນຄວາມແສບເສົ້າທີ່ບໍ່ເຄີຍພົບພານມາກ່ອນນັ້ນໄວ້ໃນໃຈ.

"ສັນຍາຮ່າຕໍາມັນເອີຍ! - ຂ້າພະເຈົ້າຄຶດພ້ອມທັງສາວບາດຕີນໄປ. - ຮອດຍາມກັບຄືນເມືອແລ້ວ. ບະນໍ, ຫາກແມ່ນໄດ້ຫນີ້ມີນຈາກຫນີ້ໄປໄວໆແລ້ວ..."

## II

ມື້ນັ້ນເຮືອງຮອງຜ່ອງໃສດ້ວຍຄວາມງາມແຫ່ງລະດູບານໃຫມ່. ດວງສຸລິຍາອັນແສນອົບອຸ່ນສາຍແສງລົງສູ່ຫນ້ານ້ຳທະເລທີ່ງຽບສະຫງົບ. ສາຍລົມເຢັນພັດຜ່ານໃບຫນ້າຂອງຂ້າພະເຈົ້າໄປຄ່ອຍໆ. ການຂຶ້ນພູນັ້ນບໍ່ເມື່ອຍຈັກຫນ່ອຍເລີຍ ເພາະຂ້າພະເຈົ້າເຄີຍປີນພູມາແຕ່ນ້ອຍແລ້ວ.

"ແຕ່ເປັນຫຍັງທີ່ ແອຊູໂອເຮີ ຈຶ່ງບໍ່ມີໃຜຈື່ຂ້າພະເຈົ້າໄດ້ເລີຍ? ຂ້າພະເຈົ້າປ່ຽນແປງໄປເກືອງຂັ້ນນັ້ນພຸ້ນຫວະ? - ຂ້າພະເຈົ້າຄຶດໃນຂະນະທີ່ຂຶ້ນເນີນໃກ້ຊິຮອດຄະລຶຫາດນັ້ນແລ້ວ. ຢູ່ໃນຮົ້ວ, ໝາບັກກິບເຫົ່າຫອນຂຶ້ນດ້ວຍຄວາມປິ້ມປິຕິເມື່ອເຫັນຂ້າພະເຈົ້າຫຍັບເຂົ້າມາໃກ້.

ຂ້າພະເຈົ້າຢຸດຈົ້ງຢູ່, ຫັ້ນໃຈຫອບ, ໃຊ້ແພມິນເຊັດເຫື່ອໜ້າຜາກແລະຕື່ນຢຸບບາດໜຶ່ງ: ຂ້າພະເຈົ້າຮູ້ສຶກຄືກັບວ່າ ໜ້າຂອງຂ້າພະເຈົ້າ... ບໍ່ແມ່ນຂອງຂ້າພະເຈົ້າ, ແຕ່ມັນແມ່ນໜ້າຂອງຜູ້ອື່ນ.

ຂ້າພະເຈົ້າແລ່ນເຂົ້າໄປໃນຄະລຶຫາດໄວປານສາຍຟ້າແມບ. ໝາບັກກິບແລ່ນມາຫາຂ້າພະເຈົ້າດ້ວຍຄວາມມ່ວນຊື່ນ, ແຕ່ມັນກືກເດະມັດໜຶ່ງໜັກໆ. ຂ້າພະເຈົ້າແລ່ນລູ່ເຂົ້າໄປໃນເຮືອນຄົວ. ໝາບັກກິບກືກລ່ວງເກີນເລີຍຮ້ອງຫງົງໆຂຶ້ນຕາມຫລັງ. ລຸງ ມິກລີ ພວມສີນລະວິນຢູ່ກັບກະຕິກກາເຟຂ້າງເຕົາໄຟ.

- ເຈົ້າຫາຍຫົວໄປໃສມາຫະ? ມິກລີ ແຜດສຽງຂຶ້ນ. - ທ່ານ ໂດບີ ກຳລັງຫາເຈົ້າເປັນວຸ້ນຢູ່... ນີ້, ກ້າຈັກບຶດກ່ອນ...

ແຕ່ຂ້າພະເຈົ້າຊໍ້າແນມເບິ່ງພໍຄົວຢ່າງຈີ້ຈໍ້.

- ລຸງມິກລີ, ເບິ່ງເຮົາແດ່ດຸ...

ລາວເຫລືອດຕາມາເບິ່ງ.

- ເອົ້າ, ເບິ່ງກໍເບິ່ງ, ແຕ່ມັນແມ່ນຫຍັງລະ?

- ລຸງບໍ່ເຫັນຫຍັງແດ່ຫວະຊັ້ນ?

- ບໍ່ເຫັນຫຍັງໝົດ.

- ສັງຊິວ່າບໍ່ເຫັນລະ? ເບິ່ງດັກໆດູລຸງ...

ມິກລີ ເລີກຄິ້ວຂຶ້ນຢ່າງສຸກຂຸມ.

- ເຊມຸຍແອນ, ຢ່າສູ່ມາຢອກບ່າ, ເຈົ້າກໍຮູ້ແລ້ວດ່ວາຂ້ອຍພວມຄາວຽກ. ມີເລື່ອງຫຍັງຫວະ?

ຂ້າພະເຈົ້າຍື່ນໜ້າຂອງຕົນເຂົ້າເກືອບຈຸໜ້າລຸງ ມິກລີ.

- ເຮົາບໍ່ໄດ້ຢອກເດີ, ບໍ່ວ່າຕີລຸງຊິບໍ່ເຫັນຫຍັງ?

ລຸງ ມິກລີ ທຶບຕີນ.

- ເຫັນແລ້ວ... ເອີ... ເຈົ້າຄືຄົນເມົາເຫລົ້ານີ້ລະ. ເຈົ້າແຕ່ງໂຕບໍ່ເຂົ້າທ່າເລີຍ. ແບບນີ້ກໍຊິກ້າໄປສະເຫນີຫນ້າທ່ານ ໂດບີ ຫວະ? ໄປນອນຢູ່ໃນຫ້ອງພຸ້ນສາ...

ທັນໃດນັ້ນ ຄວາມຄິດອັນຫນຶ່ງກໍໄດ້ກິມອຶບມາໃສ່ສະຫມອງຂອງຂ້າພະເຈົ້າ: "ແວ່ນ!"

ຂ້າພະເຈົ້າຄວ້າເອົາມືຂອງລຸງ ມິກລີ, ທັງຫັນໃຈຢູ່ໂຜ່ງ:

- ໃຫ້ເຮົາຢືມແວ່ນແດ່...

ຄວາມຄິດຕ່າງໆມັນເສັງກັນສັກຂະໂຍງຂຶ້ນໃນມັນສະຫມອງຂອງຂ້າພະເຈົ້າປານພູງມ້າພວມຫອບພະຫຍອງຢູ່ເທິງເວທີສະແດງ: "ໃນເຮືອນຫລັງນີ້ບໍ່ມີແວ່ນພໍປ່ງ: ອີ່ຕາເກົ້າບໍ່ຫ່ວງໂລກແປກປະຫລາດຜູ້ນີ້ບໍ່ຕ້ອງການເອົາໃຈໃສ່ເກືອງຮູບຮ່າງພາຍນອກຂອງຕົນເລີຍ, ແຕ່ປານນັ້ນ ລາວກໍຍັງອິດສາມາແຖຫນວດໃຫ້ເຮົາ? ຮາ! ຮາ!"

- ລຸງ ມິກລີ, ເຮົາຂໍນົບຂໍໄຫວ້ລຸງລະ, ເຮົາຂໍເອົາທຸກສິ່ງບໍ່ວ່າຈະແມ່ນຫຍັງກໍຕາມເພື່ອແລກກັບແວ່ນໃບຫນຶ່ງ!

ແຕ່ລຸງນັ້ນຊ້ຳຊຸກຂ້າພະເຈົ້າອອກ.

- ຄ່ອຍແດ່! ຈັກຫນ້ອຍ ທ່ານ ໂດບີ ຊິໄດ້ງຶນຫລະ. ຮູບຮ່າງແບບນີ້ກໍຊິ...

ຂ້າພະເຈົ້າແຜດຂຶ້ນ:

- ພວກເຜດນະຮົກເອີຍ! ຢູ່ນີ້ຫ້າມໃຊ້ແວ່ນຊັ້ນຫວະ?

ເຕົ້າກາເຟທອງປຸ້ງເຫລື້ອມມາບງຫນ່ອຍນັ້ນພວມກຶກຮົມຢູ່ເທິງເຕົາໄຟ. ອາ! ...ຂ້າພະເຈົ້າຄວ້າປຶບເອົາເຕົ້າກາເຟທີ່ພວມຍ້ອຍຈອກງລິງນັ້ນ ມາໄດ້ເອົາມັນມາແຍງຫນ້າປານແຍງແວ່ນ, ແຕ່ກໍບໍ່ສາມາດເຫັນເງົາຕົນເອງໄດ້, ດັ່ງນັ້ນ ຂ້າພະເຈົ້າຈິ່ງປິ້ງມັນລົງ ແຕ່ຫວິດຈາກເຕົາໄຟ. ເຕົ້າກາເຟຕົກກຶກພື້ນເຮືອນເລີຍແຕກປິ້ວະພາໃຫ້ນ້ຳກາເຟສີດຳປູດໄຫລອອກມາເປັນບວກໃສ່ພື້ນເຮືອນຄົວ. ປານກັບແມວພີບ້າໂຕຫນຶ່ງ, ຂ້າພະເຈົ້າພຸ່ງຕົວໄປທີ່ຝາເຮືອນຄົວ, ພະລາດບວກນ້ຳກາເຟ, ແຕ່ແລ້ວຂ້າພະເຈົ້າກໍທັນທັ້ນເອົາຫມໍ້ທອງສະອາດເຫລື້ອມພີງໆທີ່ແຂວນຢູ່ເທິງຕະປູນັ້ນ ແລ້ວເອົາກົ້ນຫມໍ້ມາແຍງເບິ່ງຫນ້າ. ຂ້າພະເຈົ້າວົນວາຍແຍງໄປແຍງມາຢູ່ກັບແວ່ນບູລົມປະກົມມະການນັ້ນບໍ່ແລ້ວບໍ່ເລົ່າ. ໃບຫນ້າທີ່ແປກປະຫລາດອັນ

ຫນຶ່ງແນມແຕ່ກົ້ນຫມໍ້ອອກມາເບິ່ງຂ້າພະເຈົ້າ. ແລ້ວຂ້າພະເຈົ້າກໍຫົວລັ່ນຂຶ້ນ, ເອົາຫມໍ້ນັ້ນຕັກເອົານ້ຳຢູ່ໃນກະຖັງ. ແລ້ວທັງຫົວທັງແລ່ນອອກໄປ. ບາດນີ້ຂ້າພະເຈົ້າຮູ້ແລ້ວວ່າຄວນຈະໃຊ້ຫຍັງແທນແວ່ນ. ບັນພະບຸລຸດສະໄຫມກ່ອນຂອງພວກເຮົາເຄີຍແຍງຫນ້ານ້ຳຕາງແວ່ນມາແລ້ວ. ຂ້າພະເຈົ້າປິ່ງຫມໍ້ລົງແລະລໍໃຫ້ຫນ້ານ້ຳເຊົາເພືອດ. ຂ້າພະເຈົ້າບໍ່ໄດ້ສົນໃຈນຳສຽງຮ້ອງສຽງຮ້າຍຕ່າງໆນາໆຂອງລຸງ ມິກລີທີ່ດັງລັ່ນອອກມາຈາກເຮືອນຄົວນັ້ນເລີຍ. ຂ້າພະເຈົ້າພວມຫຍຸ້ງຢູ່ກັບຕົນເອງ, ຂ້າພະເຈົ້າຫງ່ງງຕົວແຍງຫນ້າຢູ່ເທິງຫນ້ານ້ຳທີ່ໃສສະອາດນັ້ນ.

ຄີງຂອງຂ້າພະເຈົ້າເຢັນວາບໄປແຕ່ຫົວຈຳຕີນ. ຫນ້ານ້ຳສະທ້ອນໃບຫນ້າຫນຶ່ງທີ່ບໍ່ແມ່ນຫນ້າຂອງຂ້າພະເຈົ້າຈັກດີ້ເລີຍ.

ແຕ່ໃບຫນ້າດັ່ງກ່າວໄດ້ຫາຍວັບໄປ. ຫນ້ານ້ຳກໍຫາຍໄປເຊັ່ນກັນ. ນ້ຳໃນຫມໍ້ຖືກໃຜຜູ້ຫນຶ່ງຍົກຂຶ້ນກອກຫົດຫົວອັນຮ້ອນປານໄຟເຜົາຂອງຂ້າພະເຈົ້າ, ພ້ອມກັນນັ້ນສຽງເວົ້າທີ່ເຄັ່ງຄັດກໍດັງກ້ອງຂຶ້ນ:

- ເຊມຸຍແອນ, ເຈົ້າບັງອາດໄປດື່ມເຫລົ້າມາແຕ່ໃສຈົນເມົາເຊມາແບບນັ້ນ?

ການແນມເບິ່ງແບບຫມິ່ນປະຫມາດຂອງ ໂດບີໄດ້ຂະໂຫມະກັບແສງຕາທັງຄູ່ຂອງຂ້າພະເຈົ້າທີ່ພວມແນມຂຶ້ນໄປ. ໂດບີ ຮ້າຍດ່າຂ້າພະເຈົ້າດ້ວຍທ່າທີອ່າວເປັນຫນ້າຫວາດກົວແດ່ເລັກນ້ອຍ:

- ການລັກໄປແບບນັ້ນ ມັນກໍເປັນການລະເມີດສັນຍາຢູ່ແລ້ວແຕ່ຫນຳບໍ່ພໍເຈົ້າຍັງດື່ມເຫລົ້າອີກຫວະ? ເຖິງຈັ່ງໃດຂ້ອຍກໍໄດ້ຂໍຮ້ອງນຳເຈົ້າແລ້ວວ່າບໍ່ໃຫ້ໄປພົວພັນກັບຜູ້ລຶ້ງເຄີຍຕ່າງໆຢູ່ແອລູໂອເອີ ນັ້ນເທື່ອ. ຟ້າເອີຍ... ຂ້ອຍກໍຍັງຮ່າວວ່າອະນຸຍາດໃຫ້ຄົນຂີ້ເຫລົ້າແບບນີ້ເຂົ້າໄປໃນຫ້ອງທົດລອງເນາະ! ບາງທີຕໍ່ໄປເຈົ້າອາດຈະດື່ມຮອດຢາທົດລອງແລະຄົງວກິນທັງວັດຖຸຕົວຢ່າງໄປນຳອີກຫລະ. ຂ້ອຍບໍ່ແປກໃຈດອກວ່າຄົນຢ່າງເຈົ້ານີ້ສາມາດເຮັດໄດ້ທຸກຢ່າງ.

ຂ້າພະເຈົ້າຢືນຂຶ້ນ, ສັ່ນທົດໆເທວໆໄປທົ່ວທັງຕົວ.

- ທ່ານ ໂດບີ ທີ່ເຄົາລົບ, ຂໍທ່ານກະລຸນາ ເຊື່ອຂ້າພະເຈົ້າເທາະ, ຂ້າພະເຈົ້າບໍ່ໄດ້ດື່ມເຫລົ້າພໍຍິດເລີຍ. ຂ້າພະເຈົ້າຂໍສາບານດ້ວຍກຽດ. ແມ່ນ, ຂ້າພະເຈົ້າໄດ້ໄປທີ່ ແອລູໂອເອີແທ້, ແຕ່ຢູ່ຫັ້ນມັນຫງ່ວມເຫງົາເຖິງຂັ້ນວ່າ...

- ເລື່ອງນັ້ນກໍອະໄພໃຫ້ເຈົ້າບໍ່ໄດ້ແລ້ວ, - ໂດບີເວົ້າຢ່າງເຢັນຢາງ. - ເປັນຫຍັງເຈົ້າຈຶ່ງໄປກຸກກອນລອນລາມຢູ່ໃນເຮືອນຄົວຫັ້ນ?

- ທ່ານ, ຈະໃຫ້ຂ້າພະເຈົ້າເຮັດແນວໃດເປັນ? - ຂ້າພະເຈົ້າຮ້ອງຂຶ້ນ. - ແອເດີພິມແສດນັ້ນ ກໍຈື່ຂ້າພະເຈົ້າບໍ່ໄດ້. ລູງກໍຄືກັນ! ບໍ່ຮູ້ຈັກວ່າໃບຫນ້າຂອງຂ້າພະເຈົ້າມັນເປັນຈັ່ງໃດໄປ. ຂ້າພະເຈົ້າຈະເລົ່າລາຍລະອຽດໃຫ້ທ່ານຟັງ... ແມ້ກະທັ້ງຂ້າພະເຈົ້າກໍຈື່ຕົວເອງບໍ່ໄດ້ຊ້ຳ.

ລູງ ມິກລີ ຍ່າງເຂົ້າມາຫາແລະເວົ້າດ້ວຍຄວາມຂຸ່ນເຄືອງວ່າ:

- ໄລ່ຫົວມັນໄປສາ ທ່ານ. ແຕ່ກ່ອນອື່ນຫມົດຕ້ອງບັງຄັບໃຫ້ມັນຖູພື້ນເຮືອນຄົວກ່ອນ. ຈັ່ງແມ່ນຂີ້ສູດ, ຫນ້າບໍ່ອາຍເລີຍ...

ແຕ່ ໂດບີ ຊ້ຳມາກອດເອົາຂ້າພະເຈົ້າດ້ວຍຄວາມກະນຸກະຫນອມ ເຊິ່ງໃນຂະນະນັ້ນຂ້າພະເຈົ້າຮູ້ສຶກລ່ອຍລາຄືກັບຄົນເປັນລົມຜູ້ຫນຶ່ງ.

- ເຈົ້າໄປພັກຜ່ອນຢູ່ໃນຫ້ອງພຸ້ນສາ, ສ່ວນລູງ ມິກລີ ຮີບໄປເອົານົມເຢັນມາໃຫ້ປີນດື່ມ. ປີນຕາກແດດເລີຍເກີດອາການເຈັບຫົວຂຶ້ນ. ເຊມຸຍແອນ, ເຈົ້າກຳລັງເຈັບຫົວຢ່າງແຮງ...

- ທ່ານດີຕໍ່ຄົນທີ່ບໍ່ມີຫົວສົນປາຍນອນຜູ້ນີ້ເກີນໄປແລ້ວລະ. - ມິກລີຈົ່ມພຸມໆ. ແຕ່ຄາວດງວລາວກໍປ່ຽນຈາກໂມໂຫມາດີຕໍ່ຂ້າພະເຈົ້າແລະເວົ້າ: - ພວກເຮົາໄປກັນເທາະ, ຊິເຮັດແນວໃດໄດ້...

ຂ້າພະເຈົ້າດື່ມອີກໆຈິບນ້ຳນົມໂຈກຫນຶ່ງຢູ່ໃນເຮືອນຄົວນັ້ນເສັດອ່ອຍຫ່ອຍ ແລະຮູ້ສຶກສະບາຍຕົວຂຶ້ນມາ. ຂ້າພະເຈົ້ານັ່ງຢູ່ເທິງຕຽງໃນຫ້ອງນອນຂອງຕົນ. ໂດບີ ຢືນຢູ່ນອກປະຕູດ້ວຍທ່າທີ່ຄ່ຽມຄົມແລະຍິ້ມແຍ້ມແຈ່ມໃສ.

- ຈັ່ງໃດ ເຊມຸຍແອນ? ປະສາດເສື່ອມໄປແລ້ວຫວະ, ເອົາລະ! ...ເຈົ້າຍັງມີຫົວຕັ້ງບ່າຢູ່, ນັ້ນຄືສິ່ງສຳຄັນທີ່ສຸດ... ຈັກຫນ່ອຍຂ້ອຍຈະສັ່ງໃຫ້ເຈົ້າຄະລຳຂອງກິນເພື່ອ ບໍ່ໃຫ້ເຈົ້າສາມາດຫນີໄປທາງໃດໄດ້ອີກ...

ຂ້າພະເຈົ້າຫົວນອນສຸດຂີດ. ແລະຂ້າພະເຈົ້າກໍນອນຫລັບຝັນໄປດ້ວຍຄວາມມ່ວນຊື່ນ, ຂ້າພະເຈົ້າຝັນວ່າຕົນນັ່ງຢູ່ເທິງເຮືອໃບກີລາເຫລັ້ມງາມໆຂອງຕົນ ແລະພວມແອ່ນກວາຍຢູ່ເທິງ

ເຂດທະເລກາຣາອິບ ຂ້າພະເຈົ້ານັ່ງຢຽດແຂນຢຽດຂາຢູ່ເທິງຕັ່ງຫວາຍທີ່ແສນສະດວກສະບາຍຫນ່ວຍຫນຶ່ງຢູ່ສົ້ນຫ້ອງຂັ້ນ ໃຕ້ຮົ່ມຫລັງຄາຜ້າບັດລາຍແຊກຂອງດາດຟ້າເຮືອ. ຢູ່ເທິງໂຕະນ້ອຍນ້ອຍຕໍ່ຫນ້າຂ້າພະເຈົ້ານັ້ນແມ່ນຈອກນ້ຳຫວານເຢັນໆ - ຍ້ອນອາກາດຮ້ອນ. ຂ້າພະເຈົ້າເດ່ມືໄປເອົາຈອກນ້ຳນັ້ນແຕ່ບໍ່ສາມາດຄ້ວາເອົາມາໄດ້ ...

ມືຂອງຂ້າພະເຈົ້າໄປຕຳໃສ່ຝາເຮືອນທີ່ແຂງແກ່ນນັ້ນຈົນຮູ້ສຶກເຈັບເລີຍສະເດີດຕື່ນຂຶ້ນ.

ປະຕູປ່ອງຢ້ຽມທີ່ແສນຄຸ້ນເຄີຍນັ້ນສະທ້ອນຮູບຂອບວົງກົບຂອງມັນອອກມາພໍມົວໆ ໃນຄວາມມືດ, ຂະນະນັ້ນ ຂ້າພະເຈົ້າບໍ່ທັນຮູ້ຕົວຊ້ຳວ່າຕົນພວມນອນຢູ່ເທິງຕຽງໃນເຮືອນຂອງ ໂດບີ, ແລະຍັງລະເມີໄປວ່າຕົນຢູ່ເທິງດາດຟ້າເຮືອ. ຂ້າພະເຈົ້າຢາກຈະຫາວແຕ່ກໍ່ມັນຕຶບຕັນ. ຂ້າພະເຈົ້າຮູ້ສຶກວ່າມີໃຜຜູ້ຫນຶ່ງພວມຍ່າງໄປຍ່າງມາຄ່ອຍໆ, ຄ້າຍກັບວ່າເຂົາຜູ້ນັ້ນໃສ່ພຽງກົງຕີນແລ້ນເທົ່ານັ້ນ ແລະຫາກໍ່ອອກຈາກຫ້ອງໄປ ແລ້ວອັດຕູໄວ້ຢ່າງລະມັດລະວັງ. ຊີວິດໄດ້ສອນໃຫ້ຂ້າພະເຈົ້າມີສະຕິລະວັງຕົວຂຶ້ນມາບໍ່ຫລາຍກໍ່ນ້ອຍ. ຂ້າພະເຈົ້ານອນຢູ່ຢ່າງບໍ່ເຫນັງບໍ່ຕີງ, ຢຶດຄີງໃຫ້ຊື່ອອກດ້ວຍຄວາມລະມັດລະວັງ, ຫັນໃຈບາດຊ້າໆຢ່າງນຸ່ມນວນ, ມືສອງກ້ຳຂອງຂ້າພະເຈົ້າກໍ້ກຳເຂົ້າໄວ້ແຫນ້ນ. ຂ້າພະເຈົ້າຕຽມພ້ອມລຸກຂຶ້ນ ເພື່ອຕ່ອຍຕີກັບຜູ້ຮ້າຍ. ໃນຂະນະນັ້ນ ຂ້າພະເຈົ້າເອງບໍ່ເຊື່ອຫມັ້ນຕໍ່ຕົນເອງພໍເທົ່າໃດ. ແຕ່ຄາວຍັງນ້ອຍ ບາງຄັ້ງຄາວຂ້າພະເຈົ້າກໍ່ເຄີຍປະສົບຄວາມຢ້ານກົວທີ່ບໍ່ເປັນຕາສາເຫດຫຍັງຫມົດ ແລະກໍ່ຮູ້ວິທີຕໍ່ສູ້ກັບມັນດີ, ຄືຈະຕ້ອງຄິດທວນຫາສິ່ງໃດສິ່ງຫນຶ່ງທີ່ຈັບຈິດຈັບໃຈທີ່ສຸດ, ຂະນະນັ້ນຄວາມຢ້ານກົວກໍ່ຈະສູນຫາຍໄປເອງ.

"ແອເດີ ຈື່ຂ້າພະເຈົ້າບໍ່ໄດ້ ... ແດດຮ້ອນຈັດເຮັດໃຫ້ຂ້າພະເຈົ້າເຈັບຫົວ ... ມີເລື່ອງຫຍັງເກີດຂຶ້ນແລ້ວຫວະນີ້?"

ຂ້າພະເຈົ້າຫິວນ້ຳແຮງ, ຈຶ່ງຄ້ວາມືໄປທີ່ໂຕະ. ຈອກເທິງໂຕະບັນຈຸນ້ຳນົມຈົນເຕັມ. ຂ້າພະເຈົ້າດື່ມຈົນກ້ຽງ ແລ້ວຟັງໆເບິ່ງ. ຢູ່ອ້ອມຂ້າງມິດຈີ່ຫລີ່! ບາງທີຕອນນີ້ ໂດບີ ອາດພວມນັ່ງຢູ່ໃນຫ້ອງເຮັດວຽກ, ສ່ວນ ລຸງ ມິກລີ ນັ້ນນອນຢູ່ໃນຫ້ອງຂ້າງນີ້. ຂ້າພະເຈົ້າວາງຈອກນ້ຳນົມໄວ້ບ່ອນເກົ່າແລະ ... ຕົກສະເງີ້ຈົນຕົວແຂງ. ເງົາຂອງຄົນແປກຫນ້າຜູ້ຫນຶ່ງໄດ້ປະກົດຂຶ້ນພັບແລຢູ່ນອກວົງກົບປະຕູປ່ອງຢ້ຽມ. ມັນຫາຍວັບໄປແລ້ວພັດປະກົດຕົວຂຶ້ນມາທີ່ຂ້າງ

ປະຕູແກ້ວນັ້ນອີກ. ຂ້າພະເຈົ້າທັນໄດ້ລົ້ມຫົວນອນລົງໃສ່ຫມອນແລ້ວກໍງັບເປືອກຕາ, ເຮັດຕາຫລີ່ນ້ອຍໆ ຄືກັບພວກເສືອດາວເຄີຍເຮັດໃນຂະນະທີ່ມັນຕາງດິນອນຫລັບນັ້ນ.

ແສງໄຟສາຍຮຸ່ງວາບຂຶ້ນຢູ່ທາງນອກປະຕູແກ້ວ, ແສງສະຫວ່າງຂອງມັນປະກົດວ່າຮຸ່ງອອກມາຈາກໂຄມເຍືອງນ້ອຍໆນີ້ແຫລະ, ແສງນັ້ນຈັບຢູ່ກັບໃບຫນ້າຂອງຂ້າພະເຈົ້າປະມານສອງສາມວິນາທີແລ້ວກໍມອດວັບລົງໄປ. ສ່ວນຂ້າພະເຈົ້າກໍຄົງນອນຕົວແຂງຢູ່ຄືເກົ່າທໍາທ່າຄືຄົນພວມນອນຫລັບ. ແສງສະຫວ່າງນັ້ນຮຸ່ງວາບຂຶ້ນອີກ, ເຍືອງມາໃສ່ຫນ້າຂອງຂ້າພະເຈົ້າອີກ, ແລ້ວກໍມອດໄປ. ປະມານສອງນາທີຕໍ່ມາ, ຂ້າພະເຈົ້າຄ່ອຍໆມືນຕາຂຶ້ນ. ເງົາທີ່ຢູ່ເບື້ອງນອກປະຕູປ່ອງຢ້ຽມນັ້ນຫາຍໄປແລ້ວ. ດວງດາວທີ່ກວງໄກທັງຫລາຍຢູ່ນອກປະຕູນັ້ນກໍຄົງສ່ອງແສງໃສແຈ້ງຢູ່ເຊີ່ງມັນພາໃຫ້ຂ້າພະເຈົ້າມີຄວາມອຸ່ນໃຈ. ທັນໃດນັ້ນ, ຈິດໃຈຂອງຂ້າພະເຈົ້າກໍເກີດມີຄວາມເມີນເສີຍຕໍ່ວັດຖຸທຸກຢ່າງທີ່ຢູ່ອ້ອມຂ້າງພ້ອມກັນນັ້ນ ຄວາມຄິດຕ່າງໆຂອງຂ້າພະເຈົ້າກໍແຈ່ມໃສແລະຈະແຈ້ງ.

ຄືນຂີ້ລັກບໍ່? ດ້ວຍຈັງຫວະອັນຄ່ອຍເບົາແລະ ມິດງຽບທີ່ສຸດ, ຂ້າພະເຈົ້າຄ່ອຍໆລຸກຂຶ້ນແນມຜ່ານປ່ອງຢ້ຽມອອກໄປ. ແສງສະຫວ່າງຈາກຫ້ອງທົດລອງສ່ອງທົ່ງລົງໃສ່ຕົ້ນໄມ້ກົກຫນຶ່ງ.

ຂ້າພະເຈົ້າໄຂປະຕູຫ້ອງຂອງຕົນອອກຢ່າງລະມັດລະວັງ. ປະຕູນີ້ໄຂອອກສູ່ລະບຽງເຊີ່ງແຕ່ລະຊອກມູມນ້ອຍໆຂອງມັນນັ້ນ ຂ້າພະເຈົ້າສາມາດຮູ້ຄັກປະຈັກດີມາແລ້ວ. ຂ້າພະເຈົ້າບໍ່ຟ້າວປຸກລຸງ ມິກລີແລະໂດບີ້ຂຶ້ນມາເທື່ອ. ຂ້າພະເຈົ້າ ຍ່າງຜ່ານເຮືອນຄົວໄປ ແລະໄຂປະຕູນອກອອກຢ່າງງຽບໆ. ບັງເອີນ ໃນຂະນະນັ້ນ ຫມາບັກກົບ ແລ່ນພວດພາດອອກມາຈາກເງົາມືດແລະເລຍມືຂ້າພະເຈົ້າດ້ວຍຄວາມກະນຸກະຫນອມ. ຂ້າພະເຈົ້າລູບຫົວຫມາເພື່ອຫວັງຢາກໃຫ້ມັນອະໄພໃຫ້ແກ່ຂ້າພະເຈົ້າຍ້ອນການກະທໍາອັນບັງອາດຕໍ່ມັນຫວ່າງຕອນທ່ຽງນີ້. ຫມາບັກກົບສີຕົວໃສ່ຕີນຂອງຂ້າພະເຈົ້າແລະຫັນໃຈຍາວ, ບາງທີມັນອາດອະໄພໃຫ້ຂ້າພະເຈົ້າແລ້ວ ແລະພວມຊື່ນຊົມນໍາການຜູກສໍາພັນຄືນດ້ວຍສັນຕິວິທີດັ່ງກ່າວ. ມັນຮູ້ວ່າຂະນະນີ້ບໍ່ຄວນຈະຫັງຂຶ້ນ. ຂ້າພະເຈົ້າເຫັນໄດ້ຊັດວ່າມັນພວມແກວ່ງຫາງຢູ່ດອກແດກໆ.

ຕາຂອງຂ້າພະເຈົ້າໄດ້ລຶ້ງເຄີຍກັບການແນມເບິ່ງຢູ່ໃນຄວາມມືດມາແລ້ວ, ເວລາຍັງບໍ່

ເກີນສອງໂມງກາງຄືນເທື່ອດອກ. ຕອນໃກ້ຈະຮອດເວລາສາມໂມງພຸ້ນແລ້ວ, ແສງອາລຸນວັນໃຫມ່ຈຶ່ງຈະເລີ່ມເບີຍເບີກອອກມາ ປະກົດວ່າຢູ່ທາງກົ້ນມະຫາສະຫມຸດພຸ້ນ ບັນດາກົບເມກອັນແຫນ້ນຫນາ ແລະໃນແຫ່ງນັ້ນຄືເຂດຫວ່າງເປົ່າທີ່ມືດອ້ຳດຳປຶກແລະເລິກຂຳ. ຢູ່ເທິງຫົວຂອງຂ້າພະເຈົ້າຫມູ່ດວງດາວທີ່ເປັນຄືຮູບຕົວ ພ ຂະຫນາດຍັກ ຊຶ່ງຄ້າຍກັບວ່າມັນແມ່ນຕົວອັກສອນອຳມະຕະຕົວຫນຶ່ງທີ່ຖືກຂີດຂຽນໄວ້ເທິງທ້ອງຟ້າ ໄດ້ສ່ອງແສງຮຸ່ງລິງມາຢ່າງບໍ່ເຫນັງບໍ່ຕີງ. ຢູ່ທາງດ້ານຫລັງຄະລືຫາດ, ໂດຍອາໃສທ້ອງຟ້າທີ່ເຫລື້ອມຍິບໆຍັບໆຢູ່ດ້ວຍຫມູ່ດາວທາງຫນູສີ່ສອງນັ້ນຈະສາມາດແນມເຫັນສາຍພູຕ່ຳຢູ່ເບື້ອງລຸ່ມນັ້ນໄດ້. ຢູ່ເບື້ອງຫລັງຂອງສັນພູເຫລົ່ານີ້ ເຂົາເຈົ້າສຳນຶກເຫັນຂຶ້ນມາໄດ້ກ່ວາທີ່ຈະແນມເຫັນປະຈັກຕາເງົາແສງສະທ້ອນພໍມົວໆຂອງບັນດາພົ້ວດອກໄຟຂອງຕົວເມືອງໃຫຍ່ແຫ່ງຫນຶ່ງ.

ຫມາບັກກົບຍັງບໍ່ຢາກຫມົ້ນເຂົ້າໄປນອນຢູ່ໃນຄອກຂອງມັນ ຊຶ່ງຕັ້ງຢູ່ຂ້າງພະນັກສາມຊັ້ນນັ້ນເທື່ອ. ມັນສູດດົມຕາມຂີ້ດິນ ແລະຫັນໃຈຟ່ງໆຢູ່, ໃນທີ່ສຸດກໍຫັນໃຈຍາວຂຶ້ນຮູດຫນຶ່ງແລ້ວນອນງຽບຢູ່. ຈັ່ງຊັ້ນຫມາຍຄວາມວ່າບໍ່ມີບຸກຄົນແປກຫນ້າໃດໆເຂົ້າມາໃນເດີ່ນນີ້. ຂ້າພະເຈົ້າຈຶ່ງມີຄວາມອຸ່ນໃຈຂຶ້ນມາ ແຕ່ຊ້ຳຢາກຈະຮູ້ວ່າໃນຍາມຄ່ຳຄືນຈັ່ງຊີ້ມີຫຍັງແດ່ເກີດຂຶ້ນຢູ່ຊັ້ນເທິງ, ບ່ອນເຊິ່ງ ໂດບີພຳນັກຢູ່ນັ້ນ. ຂ້າພະເຈົ້າຈຶ່ງບ້ຽນຕົວໄປທາງຫລັງເຮືອນ. ຄ່ອຍໆຍ່າງຫີນຫລັງເຂົ້າໄປໃນພຸ່ມຕົ້ນຫມາກກໍ່. ປະຕູປ່ອງຢ້ຽມທີ່ຮຸ່ງແຈ້ງຢູ່ດ້ວຍແສງໄຟນັ້ນຖືກປິດບັງໄວ້ດ້ວຍຜ້າກັ້ງສີຂາວ ຊຶ່ງສາມາດແນມເຫັນເງົາຂອງຄົນຜູ້ຫນຶ່ງກຳລັງເຄື່ອນໄຫວຢູ່ພໍມົວໆ, ເງົານັ້ນບໍ່ຄື ໂດບີ, ແລະກໍບໍ່ຄືກັບ ນິກລີ. ມັນພາໃຫ້ຂ້າພະເຈົ້າຄຶດເຖິງໃຜນໍ? ບ້າອາຫລີ!

ຂ້າພະເຈົ້າຢືນຈັ່ງງ້າງຢູ່ຄືຮູບປັ້ນ, ບໍ່ສາມາດຮອດເອົາມືຂຶ້ນມາເສີຍພົມໄປທາງ່ອນ, ແລະສະເດີດຕົວຂຶ້ນມາໄດ້ກໍ່ຕໍ່ເມື່ອມີໃຜຜູ້ຫນຶ່ງຊຸກຂ້າພະເຈົ້າແລະເຮັດໃຫ້ຂ້າພະເຈົ້າລົ້ມຟຸບລົງ. ມືດ້ານຊາແລະເຂັ້ມແຂງທັງສອງເບື້ອງຂອງເຂົາ ກົດຂ້າພະເຈົ້າລົງດິນແຫນ້ນໆຈົນຮູ້ສຶກເຈັບປວດຂຶ້ນມາ...

-ມາພີ້, ທ່ານເອີຍ, ມາພີ້! -ສຽງຂອງລຸງ ນິກລີ ດັງຂຶ້ນຢູ່ທາງເທິງຫົວຂອງຂ້າພະເຈົ້າ. -ຂ້າພະເຈົ້າຈັບມັນໄດ້ແລ້ວ.

_ຮ້ວາຍ, ປະແຫມະ, - ຂ້າພະເຈົ້າດິ້ນ, ພະຍາຍາມເຮັດໃຫ້ຕີນຫລຸດພົ້ນອອກຈາກມືຂອງພໍ່ຄົວ. ຮ້ວາຍ, ພໍ່ລຸງ, ເປັນບ້າແລ້ວຫວະ.

ໃນຂະນະທີ່ພວມປໍ້າກັນຢູ່ນັ້ນ ພວກເຮົາໄດ້ກິ້ງໄປກິ້ງມາຢູ່ເທິງຫນານຫຍ້າ. ຫມາບັກກົບແລ່ນມາໃກ້ໆແລ້ວເຫົ່າຂຶ້ນສຽງດັງ.

- ໂອ້, ເປັນຈັ່ງຊີ້ເນາະ! - ໂດບີເວົ້າ, - ມິກລີ ຈັບມັນໄວ້ແຫນ້ນໆ.

ໂດບີ ຈັບໂຄມໄຟສາຍແລ່ນມາຫາພວກຂ້າພະເຈົ້າ. ໃນມືຂອງເພິ່ນປະກົດວ່າມີ "ເຄື່ອງຫລິ້ນ" ທີ່ຂ້າພະເຈົ້າບໍ່ມັກໃຫ້ມັນອວ່າຍມາຫາຂ້າພະເຈົ້າຈັກຫນ້ອຍເລີຍ. ມັນພາໃຫ້ຂ້າພະເຈົ້າຫວນຄຶດເຫັນທ່າທາງຂອງແດັນ ອາໂຮນໂຢ.

ໂດບີ ຫຍັບເຂົ້າມາໃກ້ໆ ແລະອອກຄຳສັ່ງ:

- ມິກລີ, ເອີ້ນ ເຊມຸຍແອນ ມານີ້!

- ຂ້າພະເຈົ້າເອງ, ທ່ານ, - ຂ້າພະເຈົ້າເວົ້າອຸ່ມໆຢູ່. - ຂໍທ່ານຈົ່ງກະລຸນາບອກລຸງ ມິກລີປ່ອຍຂ້າພະເຈົ້າອອກແດ່.

ແສງໄຟສາຍຈີ້ໃສ່ຫນ້າຂອງຂ້າພະເຈົ້າ. ມືທັງຄູ່ຂອງລຸງ ມິກລີໄດ້ວາງອອກຈາກຂ້າພະເຈົ້າແລ້ວ, ຂ້າພະເຈົ້າລຸກຂຶ້ນມານັ່ງຢູ່ເທິງຫນານຫຍ້າ, ເທົ້າຄືງໃສ່ຕີນກໍ່. ໂດບີກັດແຂ້ວກາດໆ.

- ເຊມຸຍແອນ! ພີ່ຮ່າເອີຍ, ເຈົ້າຫລອຍມາພີ້ເຮັດຫຍັງ?

ຂ້າພະເຈົ້າກົ້ມຫົວຍອມຮັບຜິດ.

- ຂໍທ່ານຈົ່ງກະລຸນາຍົກໂທດໃຫ້ຂ້າພະເຈົ້າດ້ວຍ, ຂ້າພະເຈົ້າບໍ່ໄດ້ເວົ້າໃຫ້ທ່ານຊາບໄວ້ລ່ວງຫນ້າວ່າເຊື້ອຊາດຍາດວົງຂອງຂ້າພະເຈົ້າທຸກໆຄົນທີ່ຢູ່ໃນໄວຂອງຂ້າພະເຈົ້ານີ້ ລ້ວນແຕ່ເປັນພະຍາດຫລັບຍ່າງ. ແລະຂ້າພະເຈົ້າກໍຕິດພະຍາດນັ້ນ. ຂອບໃຈນຳລຸງ ມິກລີຜູ້ໃຈດີ, ຖ້າບໍ່ມີລຸງແລ້ວເຮົາກໍຈະຫລົງຄ່ວາໄປຮອດທາງຫລວງພຸ້ນ ແລະກໍຈະຕົກເຫວໄປແລ້ວ...

- ທ່ານ, ຢ່າຊິໄປເຊື່ອມັນ. - ລຸງ ມິກລີ ເວົ້າສຽງແຫບແລະໃນໂຫ. - ມັນຂີ້ຕົວະ. ມັນກັງວຽວງນຽຢູ່ນີ້ຕັ້ງຊົ່ວໂມງກວ່າແລ້ວ. ຫາລະຂັງມັນໄວ້ຫ້ອງໃຕ້ດິນພຸ້ນ, ມື້ອື່ນເຮົາຈຶ່ງຄ່ອຍກວດກາເບິ່ງວ່າມັນຕິດພະຍາດຊະນິດໃດກັນແທ້.

- ທ່ານ ໂດບີ. ຂໍທ່ານຈົ່ງເຊື່ອຂ້າພະເຈົ້າ, - ຂ້າພະເຈົ້າເວົ້າພ້ອມທັງຍືນຂຶ້ນ ແລະຊູມືຂຶ້ນມາໂຊມກ້ານຄໍໄວ້. - ຂ້າພະເຈົ້າຮູ້ສຶກວ່າມີໃຜຄົນຫນຶ່ງແນມຜ່ານປ່ອງຢ້ຽມເຂົ້າໄປເບິ່ງຂ້າພະເຈົ້າ...

ມີກລີ ແກວ່ງຫົວ ຫລີກໆ.

- ບໍ່ເພື່ອນ, ເຈົ້າມີແຕ່ຮູ້ສຶກນັ້ນ, ຮູ້ສຶກນີ້ແບບໄຮ້ເຫດຜົນມາຫລາຍແລ້ວ, ການທີ່ເຮັດໃຫ້ທ່ານ ໂດບີຕ້ອງຫວາດວິຕົກຄືແນວນີ້ມັນໄຮ້ມະໂນທຳ.

ໂດບີ ມ້ຽນ "ເຄື່ອງຫລິ້ນ" ເຂົ້າໃນກົງ ແລະອ່ວາຍຫົວມາທາງຂ້າພະເຈົ້າ.

- ເຈົ້າໄປນອນສາ. ມື້ອື່ນຂ້ອຍຈະຈັດການກັບພຶດຕິການອັນໂງ່ງ່າວຂອງເຈົ້າ.

ທ້ອງຟ້າແດງຮຸ່ງຂຶ້ນຢູ່ເທິງຫມູ່ຍອດເຂົາ. ເມື່ອກັບເຂົ້າໄປນອນຢູ່ໃນຫ້ອງຂອງຕົນນັ້ນ, ຂ້າພະເຈົ້າໄດ້ຍິນສຽງບາດຕີນຂອງໂດບີ ຍ່າງຂຶ້ນຂັ້ນໄດເຂົ້າໄປໃນຫ້ອງທົດລອງຢ່າງຊັດເຈນ.

## III

ແສງອາທິດອັນສົດຊື່ນແຫ່ງລະດູບານໃຫມ່ສ່ອງລອດປະຕູປ່ອງຢ້ຽມເຂົ້າມາໃນຫ້ອງຂອງຂ້າພະເຈົ້າ. ແລະກໍດັ່ງທຸກຄັ້ງທີ່ຜ່ານມາ, ມີສຽງເຄາະປະຕູຢ່າງລະມັດລະວັງ.

- ເຊມຸຍແອນເອີຍ, ລຸກເຍີ. ອາຫານເຊົ້າຈັດແຈງໄວ້ຮຽບຮ້ອຍແລ້ວ. - ນ້ຳສຽງອັນຊຸ່ນເຄືອງຂອງລຸງ ມີກລີ ດັງຂຶ້ນທີ່ນອກປະຕູ.

ຂ້າພະເຈົ້າຟ້າວລ້າງຫນ້າແລະນຸ່ງເຄື່ອງນຸ່ງຂອງ ວຽກງານທຸກຢ່າງຢູ່ໃນເຮືອນຄົວກໍຄືງເປັນໄປຕາມເຄີຍ.

- ສະບາຍດີລຸງ.

ລຸງ ມີກລີ ງຶກຫົວ.

- ຈ້າວ, ສະບາຍດີທ້າວເອີຍ.

ລຸງທັກທາຍຕອບດ້ວຍຄວາມສະຫນິດສະຫນົມ, ຈົນອາດຈະເວົ້າວ່າຢ່າງກະນຸກະຫນອມຊ້ຳອີກແລະເວົ້າຕື່ມຢ່າງເຄັ່ງຂຶມວ່າ:

-ທ່ານ ໂດບີ ບອກໃຫ້ເຈົ້າປັ້ນເຂົ້າເຊົ້າຢູ່ນີ້, ແລ້ວຈັດແຈງເບິ່ງຄອກສັດເບີຫົກແລະເບີເຈັດ. ເພິ່ນຈະເອີ້ນເຈົ້າອ່ວຊ້າແດ່ເລັກນ້ອຍ.

-ຈ້າວ.

-ທ້ອງຟ້າມື້ນີ້ງາມຫລາຍ, -ມິກລີແນມເບິ່ງຂ້າພະເຈົ້າແລ້ວເວົ້າ.

-ແມ່ນແລ້ວ, -ຂ້າພະເຈົ້າຕອບດ້ວຍສຽງຄ່ອຍໆແລະສຸພາບພ້ອມກັບນັ້ນກໍເສືອກຕາແນມເບິ່ງຫມໍ້ຂາງທີ່ພວມຈືນຊີ້ນທີ່ເປັນຕາແຊບ ເຊິ່ງພວມດັງຊວາດໆຢູ່ນັ້ນ. ກິ່ນມັນຜະລັ່ງຈືນຫອມກຸ້ມໄປທົ່ວເຮືອນຄົວ. ຂ້າພະເຈົ້າເກີດຫິວຂຶ້ນມາຢ່າງຮຸນແຮງ.

ໃນຂະນະທີ່ປັ້ນນໍ້າຈິ້ມຜັກບົ່ວຢູ່ຫມໍ້ນ້ອຍນັ້ນ ລຸງມິກລີ ເວົ້າຂຶ້ນວ່າ:

-ຕົດເຂົ້າຈີ່ກິນລະແມ້, ເຊມຸຍແອນ. ເປັນຫຍັງຈຶ່ງນັ່ງຊືງຢູ່ແບບນັ້ນ? ເບິ່ງເຈົ້າຄືວ່າຍັງງ້ວງນອນຢູ່ນີ້ແຫລະ...

-ຄືລຸງຮູ້ຫັ້ນແຫລະ, ເຮົາໄດ້ນອນແຕ່ເຄິ່ງຄືນເທົ່ານັ້ນ, -ຂ້າພະເຈົ້າເວົ້າເຈາະຈີ້ໃສ່ເຫດການທີ່ເກີດຂຶ້ນແລະຈັບເອົາເຂົ້າຈີ່ຂຶ້ນມາ.

ແຕ່ ມິກລີ ຊໍ້າເບະ ສິບອອກມາແບບເຍາະເຍີ້ຍ.

-ເຈົ້ານອນກິນສອດໆຫມົດຄືນຫັ້ນ ຊິຄືແດ່ບຸ.

ຂ້າພະເຈົ້າສະເດີດຕົວຈົນອ້າປາກຊາບງາບຂຶ້ນ.

-ລຸງ ມິກລີ, ລຸງເວົ້າຫຍັງເກາະ? ຄົນຊົນຄືນນີ້ແມ່ນໃຜກົດຄໍເຮົາຈົນເກືອບຊິຫັກໄປລະ? ບໍ່ແມ່ນລຸງເອງຫວະ ເພາະຄຶດວ່າເຮົາເປັນຄົນຂີ້ລັກ.

ລຸງພໍ່ຄົວຄ່ອຍໆປົງຈານຊີ້ນຈືນລົງຫນ້າໂຕະແລ້ວແກ່ວງຫົວຊ້າໆ.

-ປາດເຂົ້າຈີ່ແລ້ວບໍ່? ເອົາລະກິນສາ, ຈັກຫນ່ອຍຊີ້ນຊິເຢັນກ່ອນ. ກິນອີ່ມແລ້ວໄປອາບນໍ້າເຢັນສາ, ແລະຢ່າຊິເວົ້າໂລງເລງແບບນີ້ອີກ. ຂ້ອຍໄປຫັກຄໍເຈົ້າຍາມໃດຫລະ?

-ຮວ້າຍ, ບໍ່ແມ່ນອີກຫວະຊັ້ນ? ດີແດ່... -ຂ້າພະເຈົ້າພຶມພໍາອັບໆອ້ຽງ ແລະໃຊ້ມືລູບຫນ້າຜາກ. ແຕ່ມັນບໍ່ມີວີ່ແວວໃດໆວ່າຂ້າພະເຈົ້າເປັນໄຂ້ເລີຍ.

ຊີ້ນຈືນພໍສຸກຮາດຢູ່ເທິງຈານນັ້ນ ເບິ່ງແລ້ວ ຈັ່ງແມ່ນເປັນຕາກິນຂະຫນາດ, ແລະຂ້າພະເຈົ້າກໍຈັດແຈງເອົາສ້ອມສຽບລົງໄປທັນທີ, ຕ້ອງເພີ່ມພະລັງໃຫ້ຮ່າງກາຍ. ພໍແຕ່ກືນຊີ້ນ

ຕ່ອນຫາໍອິດກັບນ້ຳຈິ້ມຜັກບົ່ວແຊບໆນັ້ນລົງໄປ ຂ້າພະເຈົ້າກໍຄິດສະເດືອກເກິງເລື່ອງປົກຍ່ອຍພິເສດຂອງເຫດການທີ່ເກີດຂຶ້ນໃນຄືນນັ້ນ ດັ່ງນັ້ນ ຈຶ່ງຟ້າວແລ່ນໄປທີ່ພະນັກສານຊັ້ນນັ້ນໂລດ.

- ມີເລື່ອງຫຍັງຫວະ? - ລຸງ ມິກລີ ແລ່ນຕາມມາ. - ເຈົ້າແຄ້ນເຂົ້າຫວະ?

- ຄືຊິເປັນລົມນະລຸງ, - ຂ້າພະເຈົ້າຕອບຢ່າງນົ້ມນອມ, ທັງອອກແຮງຫັນໃຈສູບເອົາອາກາດທັງລູບຄຳເອິກຂອງຕົນ. - ລຸງ ມິກລີ ເຮົາຢາກໄປຍ່າງຫລິ້ນຈັກຄາວໜຶ່ງ.

ຂ້າພະເຈົ້າທຳທ່າແນມເບິ່ງຕົ້ນກໍ່ທີ່ພວມບົ່ງດອກອອກໃບແຫ່ງລະດູບານໃໝ່ ອອກມານັ້ນຢ່າງເມີນເສີຍ. ແຕ່ຕົວຈິງຊ້ຳແມ່ນພວມກວດກາເບິ່ງຫຍ້າຢູ່ທາງລຸ່ມນັ້ນດ້ວຍຄວາມຈົດຈໍ່. ປ່າຫຍ້າກຶກເຕັງຈົນຮູບຫ່ຽວລົງແດ່ເລັກນ້ອຍ.

- ເຊມຸຍແອນ, ຢ່າໄປຢຽບຫຍ້າໃດ! - ລຸງ ມິກລີຮ້ອງຂຶ້ນເມື່ອເຫັນຂ້າພະເຈົ້າຈະໄປມໍ່ກົກໄມ້. - ຢູ່ຫັ້ນທ່ານ ໂດບີ ຫວ່ານໃບບົວບົກ...

ຂ້າພະເຈົ້າຫັນໃຈຍາວ, ກັບມາທີ່ເຮືອນຄົວ. ຊິ້ນຈືນເຢັນເສຍແລ້ວຂ້າພະເຈົ້າທັງໂມໂຫ, ທັງຫຍໍ້ຊືນ, ທັງຄຶດ: "ບໍ່ວ່າຄືຊິແມ່ນເຮົາຝັນໄປຊື່ໆ?"

ຂ້າພະເຈົ້າເວົ້າກັບລຸງພໍ່ຄົວໃນຂະນະທີ່ນັ່ງດື່ມກາເຟ:

24/VII

- ນີ້ ລຸງ ມິກລີ, ຖ້າຫາກວ່າບາງຄັ້ງເຮົາໄດ້ເຮັດໃຫ້ລຸງລຳຄານ, ລຸງກໍຢ່າໄດ້ຖືສາເຮົາເດີ...

ແຕ່ລຸງຊ້ຳຕອບຢ່າງງ່າຍດາຍວ່າ:

- ເປັນຫຍັງຈຶ່ງເວົ້າແບບນັ້ນ, ເຊມຸຍແອນ!... ຂ້ອຍບໍ່ເຄີຍພົບໃຜທີ່ມີຄວາມສຸພາບຄືເຈົ້າເລີຍ. ເອົາອີກຈັກຈອກເບາະ?

ພາຍຫລັງທີ່ຂອບໃຈລຸງ ມິກລີດ້ວຍຄວາມເວົ້າທີ່ມີມາລະຍາດທີ່ສຸດແລ້ວ ຂ້າພະເຈົ້າກໍກຳເອົາຈອກກາເຟທີ່ລາວຍື່ນໃຫ້ນັ້ນ, ແຕ່ຂະນະນັ້ນ ມີສຽງກະດິງເອີ້ນຂ້າພະເຈົ້າໄປຫ້ອງທົດລອງດັງຂຶ້ນຮູດໜຶ່ງ.

ໂດບີ ຕ້ອນຮັບຂ້າພະເຈົ້າຄືກັບບໍ່ມີເລື່ອງຫຍັງເກີດຂຶ້ນເລີຍ.

- ສະບາຍດີທ້າວ. ກະລຸນາຈັດແຈງວັດຖຸຕົວຢ່າງທີ່ເອົາມາຈາກຫລອດແກ້ວເບີສິບສາມ - ຊາວເກົ້ານັ້ນໃສ່ແຜ່ນແກ້ວໃຫ້ແດ່. ແລ້ວກອກເຫລົ້າເກົ້າສິບເຂົ້າກະປຸງແກ້ວໝູ່ນັ້ນ.

ເພິ່ນຊີ້ມືໄປໃສ່ບ່ອນໜຶ່ງ ທີ່ມີຫລອດແກ້ວບັນຈຸໜາກໄມ້ແຫ້ງລຽນເປັນສາຍຢູ່ເທິງໜ້າໂຕະ.

- ຈ້າວ, ທ່ານ.

- ເຊມຸຍແອນ. ເຈົ້າຄືເຫງົາແທ້, - ໂດບີເວົ້າໃນຂະນະທີ່ຂ້າພະເຈົ້າຈັບເອົາເຕົ້າໃສ່ເຫລົ້າເກົ້າສິບ. - ທັງເຮັດຄິ້ວສິນເຂົ້າ, ລອງແຍງເບິ່ງດູຫັ້ນ.

ບະ, ເຢີຍອີກແລ້ວ! ຂ້າພະເຈົ້າຫຶນຂຶ້ນຈິນສັ່ນ.

- ທ່ານ ໂດບີ, ໃນສັນຍາບໍ່ໄດ້ລະບຸໄວ້ວ່າທ່ານມີສິດດູໝິ່ນຂ້າພະເຈົ້າ ...

- ເຈົ້າເວົ້າຫຍັງເກາະ? - ໂດບີ ຢືນຢູ່ກາງຫ້ອງທົດລອງຢ່າງທຸ່ນທ່ຽງ. ເພິ່ນເວົ້າສຽງແຂງແລະຊັດເຈນ. - ໝາຍຄວາມວ່າຈັ່ງໃດ? ຂ້ອຍອີ່ຕົນເຈົ້າ, ແຕ່ບໍ່ແມ່ນເຢີຍເຈົ້າ. ຂ້ອຍຢາກຊ່ວຍເຈົ້າຕ່າງຫາກ.

- ຊ່ວຍຫວະ?

- ແມ່ນແລ້ວ. ເຈົ້າຈື່ບໍ່ ມື້ວານນີ້ເຈົ້າປ່ວງໄປຄືແນວໃດ? ເຊມຸຍແອນ, ເຈົ້າເວົ້າກີກແລ້ວຈັ່ງເອົາແວ່ນຢູ່ໃນຕູ້ຫັ້ນມາແຍງເບິ່ງ.

- ປະກົດວ່າເຮືອນນີ້ຫ້າມໃຊ້ແວ່ນ, - ຂ້າພະເຈົ້າເວົ້າພ້ອມທັງເບັດໜ້າໜຸ້ງ.

ໂດບີສິນຄິ້ວເຂົ້າຫາກັນ.

- ໃຜບອກເຈົ້າແບບນັ້ນລະ? ເອົາແວ່ນອອກມາ. ຢູ່ໃນຕູ້ຫັ້ນ.

ໂດຍພະຍາຍາມກັ້ນຄວາມກະຕຸ້ນໃຈໄວ້, ຂ້າພະເຈົ້າໄຂຕູ້ອອກ. ຢູ່ໃນລິ້ນຊັກ ທ່າມກາງທໍ່ຂອງຕ່າງໆ ແລະບັນດາແກ້ວເຫລົ່ານັ້ນມີແວ່ນນ້ອຍຂະໜາດຕິດກະເປົາງາມໆແຜ່ນໜຶ່ງ.

ໂອຍ, ໃບໜ້າຂອງຂ້າພະເຈົ້າມັນໜ້າອະເຫຍືອງທີ່ສຸດ, ຍັງມີວາດງ້ວງນອນແລະມີໜວດເຕັມເກະກະຢູ່! ມັນແມ່ນໃບໜ້າທີ່ແປກຕ່າງ! ແຕ່ບໍ່ແມ່ນໜ້າຂອງຂ້າພະເຈົ້າດອກ!

ແວ່ນຫລຸດຈາກມືຂອງຂ້າພະເຈົ້າລົງໄປແລະແຕກມຸ່ນ.

- ເຈົ້າມັນກະລີກກະລິນໂພດ! - ໂດບີ ເວົ້າດ້ວຍຄວາມຂຸ່ນເຄືອງ ພ້ອມທັງເກັບເອົາເສດແວ່ນແຕກນັ້ນຂຶ້ນມາ.

- ເຮົາເປັນຫຍັງໄປນີ້? - ຂ້າພະເຈົ້າພຶມພໍາດ້ວຍຄວາມຫວາດກົວ ແລະລູບໆຄໍາໆເບິ່ງໜ້າ. - ຂີ້ທູດຫລື?

ໂດບີ ຈັບບ່າທັງສອງຂອງຂ້າພະເຈົ້າແລ້ວກົດລົງໃສ່ຕັ່ງອີກ.

- ເດັກຂີ້ໂຍ່ຍ, ອ່ອນແອຜູ້ຫນຶ່ງແຕ່ປານນັ້ນຂ້ອຍຍັງເຂົ້າໃຈວ່າເປັນຄົນກ້າຫານ! ເອົາລະຢ່າຊິຄຶດອີກເທາະ!

- ທ່ານກະລຸນາຊີ້ແຈງໃຫ້ຂ້າພະເຈົ້າຮູ້ແດ່ວ່າ ຂ້າພະເຈົ້າເປັນຫຍັງຈຶ່ງເປັນຈັ່ງຊີ້? - ຂ້າພະເຈົ້າເວົ້າດ້ວຍນ້ຳສຽງທີ່ແຂງກະດ້າງ.

ໂດບີ ຫົວເບະສົບ.

- ຍີ ເຊມຸຍແອນ, ເປັນຈັ່ງໃດ, ເບິ່ງຕາເຈົ້າຄືວ່າມີຄວາມແຄ້ນເຄືອງ ແລະເຂົ້າໃຈຍາກແທ້. ຈົ່ງພະຍາຍາມເຂົ້າໃຈເລື່ອງທີ່ຂ້ອຍຈະເວົ້ານີ້, ແລະເຈົ້າຈະຮູ້ສຶກລະອາຍຕໍ່ການຂາດເຈດຕະນາດີຂອງເຈົ້າ... ເອີ... ເອົາລະງ... ຢູ່ນີ້ບໍ່ມີເລື່ອງຫຍັງເກີດຂຶ້ນກັບເຈົ້າທັງນັ້ນ... ຢູ່ນີ້ບໍ່ມີເລື່ອງຫຍັງເກີດຂຶ້ນກັບເຈົ້າທັງນັ້ນ... ແຕ່ຕອນເຈົ້າຢູ່ພະມ້າ, ເຈົ້າໄດ້ຈັບງູ ເດີຍີເຣີຢູ່ໃນມື, ແລະຕິດພະຍາດທີ່ເຂົາເຈົ້າເອີ້ນກັນວ່າ "ພະຍາດຂອງຄົນເຕ້ຍ" ມາຈາກມັນ. ນັ້ນແມ່ນວິຣຸດພິດຊະນິດຫນຶ່ງ, ມັນໄດ້ກໍ່ໃຫ້ເກີດການປ່ຽນແປງຕ່າງໆຂຶ້ນຢູ່ໃນບັນດາເຫຍື່ອຈຸລັນໃນຮ່າງກາຍ. ເປັນທີ່ຮູ້ກັນວ່າ ງູ ເດີຍີເຣີ ບາງຊະນິດນັ້ນເປັນຊີກາງໃຫ້ແກ່ການສົ່ງເຊື້ອວິຣຸດນັ້ນ.

ດ້ວຍບໍ່ສາມາດຫັກຫ້າມຕົນເອງໄວ້ໄດ້, ຂ້າພະເຈົ້າພຸດລຸກຂຶ້ນ.

- ຂ້າພະເຈົ້າບໍ່ເຊື່ອທ່ານດອກ! ທ່ານມິນໂຣຍເຊີຮູ້ຈັກງູດີກວ່າທ່ານ! ຖ້າພວກງູ ເດີຍີເຣີສາມາດສົ່ງເຊື້ອວິຣຸດແລ້ວ ເປັນຫຍັງເພິ່ນຈຶ່ງຈະບໍ່ບອກຂ້າພະເຈົ້າ. ຫາລະໂຫລະເລກໄປການເພິ່ນຢູ່ຮັງກູນພຸ້ນໂລດ... ເພິ່ນຮູ້ຈັກວິຣຸດດີກວ່າທ່ານອີກ. ເພິ່ນເປັນນັກວິທະຍາສາດທີ່ແທ້ຈິງ, ທ່ານມິນໂຣຍເຊີ ຜູ້ມີເມດຕາຈິດຂອງຂ້າພະເຈົ້າຄົນນັ້ນນະ...

ໂດວີແກ່ວງຫົວ.

- ນີ້, ເຊມຸຍແອນ, ບໍ່ວ່າຕິວ່າຂ້ອຍຊິບໍ່ຮູ້ຈັກພວກທີ່ໄດ້ຄົ້ນຄວ້າຫລືພວມຄົ້ນຄວ້າວິຣຸດກັນຢູ່ທຸກໆຄົນ? ໄດ້, ພວກເຮົາຊິລອງຖາມ ມິນໂຣຍເຊີເບິ່ງກໍໄດ້, ແຕ່ເພິ່ນກໍຈະຕອບມາແບບຂ້ອຍວ່ານັ້ນແລ້ວ. ວິທີສົ່ງເຊື້ອ ວິຣຸດມີຫລາຍທາງທີ່ສຸດ. ພວກເຮົາຍັງຈະຕ້ອງຄົ້ນຄ້ວາພວກມັນໄປອີກດົນ. ນັ້ນແມ່ນວິທີທີ່ດີທີ່ສຸດ ເພື່ອຈະຄົ້ນຫາສິ່ງຈັບໃຈນີ້ໃຫ້ພົບ. ຂ້ອຍ

ພຽງແຕ່ເວົ້າໃຫ້ເຈົ້າຮັບຮູ້ບັນຫາປີກຍ່ອຍຫນຶ່ງຄືຈັ່ງຊີ້ແຫລະ. ແລະບັນຫານີ້ມັນພົວພັນເຖິງເຈົ້າ...

ເພື່ອສະແດງຄວາມເຫັນພ້ອມ, ຂ້າພະເຈົ້າໄດ້ແຕ່ກົ້ມຫົວແລ້ວນັ່ງລົງຕັ່ງອີ້.

## IV

- ດົນນານມາແລ້ວ, - ໂດບີ ເລີ່ມຕົ້ນເລົ່າເລື່ອງ, - ຂ້ອຍມີເພື່ອນຫນຸ່ມຄົນຫນຶ່ງ. ດຽວນີ້ລາວບໍ່ມີຊີວິດຢູ່ອີກແລ້ວ. ລາວໄດ້ພົບກັບໄພພິບັດ ຂ້ອຍລຶ້ງເຄີຍກັບລາວຢູ່ທີ່ ແບັກແປເອີທີ່ ໂຊມາລີ, ປະເທດຫົວເມືອງຂຶ້ນຫນຶ່ງຂອງພວກເຮົາ ມີທ່າກຳປັ່ນແຫ່ງຫນຶ່ງ. ເຈົ້າຮູ້ຕິະຢູ່ທະວີບ ອາຟລິກກາຫັ້ນບໍ່? - ຍາມໃດ ເພື່ອນຄົນນີ້ກໍ່ຖືກດຶງດູດດ້ວຍການໄປທ່ອງທ່ຽວຢູ່ຕະຫລອດ. ແຕ່ລາວຍັງຫນຸ່ມ, ລາວບໍ່ພຽງແຕ່ເປັນຫ່ວງນຳບ່ອນຢູ່ອັນສະດວກສະບາຍພາຍໃຕ້ແສງອາທິດເທົ່ານັ້ນ, ແລະກໍບໍ່ໄດ້ເປັນຫ່ວງນຳແຕ່ເລື່ອງກິນໃຫ້ອີ່ມເທົ່ານັ້ນ. ມັນສະຫມອງຂອງລາວກໍທວງໃຫ້ມີອັນຫລໍ່ລ້ຽງເຊັ່ນກັນ ມັນສະຫມອງຂະຫຍາຍຕົວໄດ້ກໍເພາະໄດ້ອ່ານປຶ້ມດີໆ. ເພື່ອນຂອງຂ້ອຍຜູ້ນີ້ເຄີຍຫິວກະຫາຍຢູ່ເລື້ອຍໆ, ແຕ່ລາວໄດ້ອ່ານທຸກສິ່ງທຸກຢ່າງທີ່ກ່ຽວພັນເຖິງສັດຕະສາດແລະພືກສາຊາດ. ລາວຢາກເປັນນັກວິທະຍາສາດ. ລາວເກັບທ້ອນເງິນຄຳໄດ້ແລ້ວເດີນທາງໄປ ອາຟລິກກາກາງ ເປັນອັນວ່າ ພວກເຮົາໄດ້ລຶ້ງເຄີຍກັນຢູ່ບົນເສັ້ນທາງໄປຍັງຖິ່ນດັ່ງກ່າວ.

"ຂ້ອຍຢາກ, ລາວເວົ້າ, - ທຳການຄົ້ນຄວ້າຢ່າງເລິກເຊິ່ງເຖິງກອງກ່ຽວກັບພູມີສາດ. ທ່ານໂດບີ, ຫາກແມ່ນທ່ານເຂົ້າໃຈເຖິງຄວາມຄຶດດັ່ງກ່າວວ່າມັນພວມຂ້ຽວເຂັ້ນໃຈຂ້າພະເຈົ້າເຖິງພຽງໃດແລ້ວ!"

ແຕ່ຊິໃຫ້ຂ້ອຍຕອບລາວແບບໃດ? ຈະຕອບວ່າຈະຕ້ອງເຮັດວຽກທຳງານຢ່າງສຸດຈະລິດໃຈບໍ່? ຫລືຈະຕອບວ່າຜ່ານມາຍັງບໍ່ມີໃຜສາມາດປະສົບຜົນສຳເລັດທາງດ້ານຄົ້ນຄວ້າໂດຍບໍ່ຜ່ານການເຮັດວຽກຢ່າງລືມຕົວເລີຍ. ຫລືຈະວ່ານັກທັດສະນາຈອນພູມີສາດຈະຕ້ອງກຽມພ້ອມສ້າງຜົນງານອັນມະຫັດສະຈັນຂຶ້ນມາສະເຫມີຊັ້ນຫວະ?

ຂ້ອຍເອງກໍໄປ ອາຟລິກກາກາງ ພາຍຫລັງໄດ້ກະກຽມຢ່າງຄົບຖ້ວນສົມຄວນແລະກໍດ້ວຍຈຸດ

ປະສົງອັນແນ່ວແນ່. ເພື່ອຄົ້ນຄວ້າວິຊຸດຂອງພືດທີ່ເປັນໜ້າສົນໃຈນັ້ນ. ຢູ່ທີ່ຄາຣາເຣີຂ້ອຍໄດ້ມີຄວາມສຳພັນເປັນພິເສດກັບຊາຍໜຸ່ມຄົນນັ້ນ. ພວກເຮົາໄດ້ຕົກລົງພ້ອມໃຈກັນເດີນທາງຕໍ່ໄປ. ຢູ່ນະຄອນຫລວງອາດີດອາເບບາ, ພວກເຮົາໄດ້ລວບລວມສັດລຳລຽງຂອງພວກເຮົາເຂົ້າເປັນໝວດໜຶ່ງໝວດດຽວກັນແລ້ວສືບຕໍ່ເດີນທາງໄປຍັງທິດຕາເວັນຕົກ.

ຂ້າມພູບົງໄປແລ້ວ, ພວກເຮົາກໍໄປເຖິງພູພຽງ ອູໂກໂກ. ຄົນທີ່ອາໄສຢູ່ນີ້ມີຮູບຮ່າງເຕ້ຍໆ, ເຂົາເຈົ້າອາໄສຢູ່ໃນຕູບໄມ້ອໍ້ ແລະກົກສັດຮ້າຍຂົ່ມຂູ່ຢູ່ຕະຫລອດເວລາ, ແຕ່ພວກນາຍທຶນທ້ອງຖິ່ນທີ່ບັງຄັບໃຫ້ເຂົາເຈົ້າຂຸດຂີ້ຊາຍຢູ່ຕາມຫ້ວຍຮ່ອມຕ່າງໆເພື່ອຮ່ອນຄຳນັ້ນ ຍິ່ງຂົ່ມຂູ່ເຂົາເຈົ້າໜັກກ່ວານັ້ນອີກ. ຂ້ອຍແລະເພື່ອນໄດ້ພາກັນອາໄສຢູ່ໃນຕູບໄມ້ທ່ອນແຄບໆຫລັງໜຶ່ງເພື່ອລໍຖ້າໃຫ້ລະດູໜາວຂອງເຂດອາກາດຮ້ອນພ້ອມກັບຫ່າຝົນອັນແສນລຳຄານໃຈນັ້ນ ຜ່ານພົ້ນໄປສາກ່ອນ.

ເພິ່ນບໍ່ສາມາດເວົ້າອອກມາໄດ້ວ່າທົ່ວທັງເຂດ ອູໂກໂກນັ້ນ ມີທັດສະນີຍາພາບທີ່ງົດງາມເລີຍ. ປ່າໄມ້ທີ່ເປັນຫຍ່ອມນ້ອຍໆເຫລົ່ານັ້ນມັນບໍ່ຕ່າງຫຍັງ ກັບ ໝູ່ຫຍ້າ ຢູ່ທ່າມກາງເຂດເປົ່າຫວ່າງອັນກວ້າງໄກໄພສານເທົ່ານັ້ນ. ບັນດາທົ່ງນາແຄມບ້ານ - ຂ້ອຍຈື່ບໍ່ໄດ້ແລ້ວວ່າ ມັນແມ່ນບ້ານຫຍັງ -ນັ້ນກໍເກົ້າແກ່ແລະຄັບແຄບ. ພວກຄົນເຕ້ຍ ອູໂກໂກ ເກັບໝາກໄມ້ສີເຫລືອງມາຈາກພຸ່ມໄມ້ຕ່າງໆ, ບົດໃຫ້ມຸ່ນແລ້ວປົນກັບສາລີ, ນວດໃຫ້ເປັນແປ້ງໜຽວໆແຂັນໆແລ້ວເອົາມາເຮັດຂະໜົມຕົ້ມ ແລະຈີ່ໃສ່ໄຟແດງ. ນັ້ນແມ່ນອາຫານຕົ້ນຕໍຂອງພວກຄົນເຕ້ຍ. ຮູບພາບທີ່ຄ້າຍຄືກັນນີ້ ພວກເຮົາເຄີຍໄດ້ເຫັນມາແລ້ວແຕ່ຄາວທີ່ພວກເຮົາຜ່ານ ອູການດາໃນລະຫວ່າງທີ່ມຸ່ງໜ້າໄປຍັງ ອູໂກໂກນັ້ນ, ແຕ່ ອູການດາ ມັນຢູ່ທິດຕາເວັນອອກຂອງ ອູໂກໂກ, ໃກ້ທະເລກ່ວາ. ທີ່ ອູການດາ, ດົນໆເຂົາເຈົ້າກໍຍັງໄດ້ແຫ້ນຊີ້ນຄວາຍສົດແດ່ ແລະເຄື່ອງກະປອງທີ່ເອົາມາຈາກຖິ່ນອື່ນ. ສ່ວນອູໂກໂກ ນັ້ນມັນຊາດແມ່ນບ່ອນເປັນຕາສາບແຊ່ງອີຫລີ. ສະເພາະຂ້ອຍແລ້ວ, ຢູ່ຫັ້ນບໍ່ມີຫຍັງຕິດໃຈເລີຍ, ແລະພວກເຮົາທັງສອງກໍໄດ້ຊວນກັນກັບຄືນ. ພວກເຮົາຢາກຂຶ້ນໄປທາງທິດເໜືອ, ໄປຈົນເຖິງຍອດແມ່ນ້ຳນິນທີ່ຢູ່ໃກ້ກັບ ວາເດລີພຸນ, ແລ້ວລົງມາທາງທິດ ອາຊູອານແລະສິ້ນສຸດການທ່ອງທ່ຽວທະວີບອາຟລິກກາຢູ່ທີ່ ໄຄໂຣ.

ມີເທື່ອໜຶ່ງເພື່ອນຂອງຂ້ອຍເຂົ້າປ່າໄປເຫັນພຸ່ມຕົ້ນໜາມ ທີ່ມີໝາກສີເຫລືອງດົກຢູ່,

ທາງໃນຂອງໝາກໄມ້ນີ້ມີທາດມັນມື່ນໆຫນຽວ. ຕົ້ນໄມ້ຊະນິດນີ້ເຮັດໃຫ້ຂ້ອຍມີຄວາມສົນໃຈ. ແຕ່ມັນບໍ່ໄດ້ກໍ່ຄວາມສົນໃຈຫຍັງໃຫ້ແກ່ເພື່ອນຫນຸ່ມຄົນນັ້ນເລີຍ. ລາວໃຝ່ຝັນແລະຫິວໂຫຍຫາແຕ່ການຄົ້ນຄ້ວາທີ່ຜິດປົກກະຕິ, ດ້ວຍເຫດນັ້ນຈຶ່ງໄປສົນໃຈນຳຕົ້ນໄມ້ທີ່ມີຮູບຮ່າງມະຫລູດຕູດຕິດ, ຂີ້ເຮີຂີ້ຮ້າຍຄືກັບຕົ້ນແປກນັ້ນ?

ເວົ້າທົ່ວໄປແລ້ວ ລາວຜິດຫວັງໃນການເດີນທາງຂອງພວກເຮົາຄັ້ງນີ້ ເກີນຂັ້ນວ່າ. ຕໍ່ມາບໍ່ດົນລາວກໍຫນີຂຶ້ນໄປທາງທິດເຫນືອຢ່າງບໍ່ໄດ້ລໍຖ້າຂ້ອຍເລີຍ.

ເມື່ອຂ້ອຍເອົາຕົ້ນໄມ້ໝາກເຫລືອງນັ້ນເຂົ້າມາໃນບ້ານ, ຊາວທ້ອງຖິ່ນ ຜ່ານຈາກນາຍພາສາ, ໄດ້ເວົ້າກັບຂ້ອຍວ່າ ຢູ່ນີ້ເຂົາເອີ້ນກົກໄມ້ນີ້ແມ່ນ "ຕົ້ນຫນາມຂອງຊາວ ບຸສະແມນ", ແລະນ້ຳທີ່ບີບເອົາມາຈາກຕົ້ນໄມ້ຫມາກເຫລືອງຊະນິດນີ້ພາໃຫ້ເກີດກຳລັງແຮງພິດສະດານຢ່າງຫນຶ່ງ. ຂ້ອຍເລີ່ມເກັບທ້ອນຂໍ້ມູນກ່ຽວກັບຕົ້ນຫນາມຊະນິດຕ່າງໆກັນໄວ້ຊຸດຫນຶ່ງ, ແລະກໍສັງເກດເຫັນໄດ້ວ່າ ຢູ່ກ້ອງພຸ່ມໄມ້ດັ່ງກ່າວເຕັມແຕ່ຝູງງູ ເດີຍີເຮີຍ່າວໆຢູ່. ການເດີນທາງເພື່ອຄົ້ນຄ້ວາພຶກສາຊາດຂອງຂ້ອຍ ໄດ້ກາຍເປັນເລື່ອງທີ່ອັນຕະລາຍທີ່ສຸດ. ຂ້ອຍເອົາຊາວທ້ອງຖິ່ນໄປນຳຊາວຄົນ, ແລະເຂົາເຈົ້າກໍກ້າຫານຂະຫນາດ, ເຂົາເຈົ້າໄລ່ຝູງງູອອກຈາກພຸ່ມໄມ້ຕ່າງໆໄດ້ຢ່າງຄ່ອງແຄ້ວ, ຈົນກະທັ້ງຊູ່ມື້ນີ້ ຂ້ອຍຍັງຄຶດອະເຫຍືອງຄຶງກັບຝູງງູເຫລົ່ານັ້ນຢູ່. ຂະນະນັ້ນຂ້ອຍຕ້ອງເຮັດວຽກທຳງານຢ່າງຫນັກຫນ່ວງ, ແຕ່ຂ້ອຍກໍບໍ່ມີຄວາມກິນແຫນງແຄງໃຈຫຍັງຕໍ່ເລື່ອງນັ້ນດອກ. ຂ້ອຍພໍໃຈກັບຕົ້ນຫນາມຊະນິດນັ້ນທີ່ສຸດ. ຫມາກທັງຫລາຍຂອງມັນກໍຖືກຄົນເຕ້ຍ ອູໂກໂກ ນຳໄປປຸງເປັນອາຫານ, ແຕ່ກໍສາມາດກິນໄດ້ພຽງແຕ່ໃນລະດູຫນຶ່ງຂອງປີເທົ່ານັ້ນ. ການກິນອາຫານຊະນິດນີ້ເປັນຈັ່ງຊີ້.

ເມື່ອລະດູຝົນສິ້ນສຸດລົງ ແລະຊາວບ້ານໄດ້ກະກຽມການກິນລ້ຽງຕ້ອນຮັບຄືນເດືອນເພັງນັ້ນ, ພວກແມ່ຍິງໄດ້ພາກັນອອກໄປຍັງເຂດທົ່ງຮາບ, ຂາກັບເຂົາເຈົ້າກໍໄດ້ເປັກິງທີ່ບັນຈຸຫມາກໄມ້ທີ່ຂ້ອຍຮູ້ຈັກນັ້ນມາເຕັມອັດ. ເຂົາເຈົ້າບີບຄັ້ນມັນໃຫ້ກາຍເປັນນ້ຳຂຸ້ນຝາດໆ ແລ້ວກອກນ້ຳອອກ, ສ່ວນເສດທີ່ເຫລືອຈາກການບີບຄັ້ນນັ້ນກໍເອົາມາປົນກັບເຂົ້າຈີ່. ຂ້ອຍເອົາໃຈໃສ່ສັງເກດເບິ່ງການກະທຳເຫລົ່ານີ້ຂອງພວກແມ່ເຈົ້າເຮືອນຊາວຜິວດຳດ້ວຍຄວາມຈົດຈໍ່. ຂ້ອຍມີນາຍພາສາດີໆຢູ່ຄົນຫນຶ່ງ, ມີປະສົບການຢ່າງກ້ວາງຂວາງ ແລະຍັງມີເຫລົ້າເກົ້າສິບເຫລືອຢູ່ນ້ອຍຫນຶ່ງ.

ດ້ວຍເຫດນັ້ນ, ຊາຍຊະລາ ອູໂກໂກ ທັງຫລາຍຈຶ່ງພ້ອມກັນມາເຊີນຂ້ອຍເຂົ້າຮ່ວມວັນບຸນນີ້ນຳ. ພໍຕາເວັນຕົກ, ຊາວທ້ອງຖິ່ນກໍເລີ່ມຕົ້ນເຕັ້ນລະບຳ ແລະຫລິ້ນດົນຕີທີ່ດັງຈົນຫນວກຫູຊະນິດຫນຶ່ງເຊິ່ງເຄື່ອງດົນຕີນັ້ນເຮັດດ້ວຍລຳໄມ້ອໍ້ປະສານກັບສຽງກອງສັ່ນ. ຕໍ່ມາຊາວ ອູໂກໂກ ກໍດື່ມນ້ຳຫມາກໄມ້ນັ້ນ, ປະກົດວ່ານ້ຳອັນນີ້ກາຍເປັນນ້ຳເຫລົ້າໄວທີ່ສຸດ, ເພາະພວກເຕັ້ນລະບຳຢູ່ນັ້ນເມົາໄວຂະຫນາດ, ແລ້ວພວກລູກເມຍຂອງເຂົາເຈົ້າຕ້ອງພາເຂົາເຈົ້າໄປນອນຢູ່ໃນຕູບຫມູ່ນັ້ນ. ຊາວບ້ານພາກັນກິນເຂົ້າຫນົມທີ່ເຮັດດ້ວຍເສດຫມາກໄມ້ຫນາມນັ້ນຢູ່ເປັນເວລາສາມມື້ສາມຄືນລຽນຕິດກັນ. ເຂົາເຈົ້າເຊີນຂ້ອຍ, ແຕ່ນາຍພາສາບໍ່ຍອມກິນແລະບອກບໍ່ໃຫ້ຂ້ອຍກິນຄືກັນ. ລາວເວົ້າວ່າ: "ຊາວ ອູໂກໂກ ຖືວ່າຫມາກຫນາມນີ້ເສີມສ້າງກຳລັງວັງຊາດີ, ຈິດໃຈປອດໂປ່ງແລະມີອາຍຸຍືນຍາວ ສຳລັບຜູ້ທີ່ຮູ້ຈັກໃຊ້ມັນມາປຸງເປັນອາຫານເທົ່ານັ້ນ. ແຕ່ມັນຈະເຮັດໃຫ້ຄົນໃຫຍ່ຂຶ້ນບໍ່ໄດ້ແລະກາຍເປັນຄົນເຕ້ຍໄປຕະຫລອດຊີວິດ".

ແມ່ນແທ້, ໃນກຸ່ມຄົນເຕ້ຍ ອູໂກໂກ ມີບາງຄົນກໍມີຮ່າງກາຍນ້ອຍໆຈ່ອຍໆທັງມີທ້ອງໂຊ່ນຄືຄົນໂລພາ, ແຕ່ແຂງແຮງພີລຶກ ເຖິງແມ່ນວ່າຫນວດຄາງກະໄດຈະຫງອກ ແລະໃບຫນ້າຫຸບຫ່ຽວໄປແລ້ວກໍຕາມ.

- ຈັ່ງໃດອີກລະ? - ຂ້າພະເຈົ້າຖາມ.

- ຂ້ອຍເອົາວິຣຸດບໍລິສຸດມາໄດ້ຈາກຫມາກໄມ້ເຫລືອງເຫລົ່ານັ້ນ, ວິຣຸດຊະນິດນີ້ເຮັດໃຫ້ໃບໄມ້ບາງຈຳພວກປົ່ງຫນາມຂຶ້ນ. ຂ້ອຍຢູ່ ອູໂກໂກສອງປີ ແລະໄດ້ກວດກາຄືນກ່ຽວກັບການປ່ຽນໂສມນີ້ຜ່ານການທົດລອງ. ເລື່ອງນີ້ມັນໄດ້ກະຕຸກຊຸກຍູ້ໃຫ້ຂ້ອຍອຸທິດຊີວິດຂອງຕົນທັງຫມົດໃຫ້ແກ່ພາລະກິດຄົ້ນຄ້ວາວິຣຸດ. ທຸກສິ່ງທຸກຢ່າງທີ່ພວມເກີດຂຶ້ນໃນຕົວຂອງເຈົ້າ ລ້ວນແຕ່ໄດ້ຢັ້ງຢືນເຖິງການຄົ້ນຄ້ວາຂອງຂ້ອຍ. ເອົາລະບໍ່ຕ້ອງຫມົດກຳລັງໃຈດອກ . ຂ້ອຍຈະຊ່ວຍເຈົ້າ . ຂ້ອຍຈະປົວເຈົ້າໃຫ້ຫາຍຈາກພະຍາດບາດເຍົານີ້ .

ເລື່ອງ ໂດບີ ເລົ່າ ປະກົດວ່າເປັນຄວາມຈິງ. ຂະນະນັ້ນຂ້າພະເຈົ້າບໍ່ໄດ້ຄິດເຖິງເລື່ອງຈະໂຕ້ຖຽງກັບເຈົ້ານາຍແຕ່ຢ່າງໃດເລີຍ. ເອົາລະຫາລະປ່ອຍໃຫ້ເພິ່ນປົວຂ້າພະເຈົ້າໃຫ້ຫາຍຈາກພະຍາດວິຣຸດນີ້. ແລ້ວຂ້າພະເຈົ້າກໍເອີ່ຍຂຶ້ນດ້ວຍນ້ຳສຽງຂອງຜູ້ມີຄວາມຜິດວ່າ:

- ທ່ານ, ຂໍທ່ານຈົ່ງຍົກໂທດໃຫ້ຂ້າພະເຈົ້າດ້ວຍ. ຂ້າພະເຈົ້າອາດເປັນຄົນເນລະຄຸນ. ແຕ່ຂໍໃຫ້ທ່ານຈົ່ງເຂົ້າໃຈໃນສະພາບຂອງຂ້າພະເຈົ້າ...

- ນີ ເຊມຸຍແອນ, ທຸກສິ່ງຢ່າງມັນຈະຄ່ອຍໆເຂົ້າຮູບເຂົ້າຮອຍໄປເອງດອກນາ, - ໂດບີ ຕົບບ່າຂ້າພະເຈົ້າດ້ວຍຄວາມຮັກແພງ. - ວິຣຸດ ທີ່ເອົາມາຈາກຕົ້ນໄມ້ເຕັຍເຫລົ່ານັ້ນ ແມ່ນວິຣຸດຊະນິດທຳອິດ ເຊິ່ງຕໍ່ມາຂ້ອຍໄດ້ລ້ຽງເຂົ້າໃສ່ໃນໂຕສັດຢູ່ໃນຫ້ອງທົດລອງ. ຂ້ອຍຄົ້ນຄ້ວາວິຣຸດເພື່ອຈຸດປະສົງອັນໃດ? ຄົ້ນຄ້ວາເພື່ອຝຶກຊ້ອມມັນ, ເຮັດໃຫ້ພວກມັນກາຍເປັນເຄື່ອງມືທີ່ນຳຄຸນປະໂຫຍດມາໃຫ້ແກ່ມະນຸດ.

ບະ. ອີ່ຕາ ໂດບີນີ້ຊ່າງເວົ້າແລະຊ່າງບັນຊາໃຫ້ຜູ້ອື່ນຕ້ອງຟັງຄວາມເວົ້າຂອງລາວ.

- ນີ ເຊມຸຍແອນ, ພະຍາດຂອງເຈົ້າຈະຫາຍເປັນປົກກະຕິຢ່າງບໍ່ປະຮ່ອງຮອຍຫຍັງໄວ້ເລີຍ, - ໂດບີ ເວົ້າດ້ວຍຄວາມເຊື່ອຫມັ້ນ.

- ຂໍໂທດທ່ານ, ຄັນຊັ້ນຂ້າພະເຈົ້າຈະບໍ່ນ້ອຍລົງແລະກາຍເປັນຄົນເຕັຍໄປຫວະ? - ຂ້າພະເຈົ້າຖາມດ້ວຍຄວາມກັງວົນ.

- ເປັນໄປບໍ່ໄດ້, - ໂດບີຫົວ. - ເອົາລະ, ເຈົ້າຖອກເຫລົ້າໃສ່ກະປຸງແກ້ວຊຸມນັ້ນສາ. ພໍດີແຫລະ, ຢູ່ໃນນັ້ນ, ເຈົ້າເຫັນຕີ, ແມ່ນພວກຫມາກໄມ້ເຫລືອງແຫ້ງ "ຕົ້ນຫນາມຂອງຊາວປູສະແມນ". ພວກເຮົາຈະເອົາທາດກັ່ນຈາກຫມາກໄມ້ເຫລົ່ານັ້ນ, ແຍກເຫລົ້າເກົ້າສິບອອກແລ້ວຈະໄດ້ທາດຢາງກອກບໍລິສຸດ. ມີລັກສະນະສະເພາະທີ່ຫນ້າຈັບໃຈທີ່ສຸດ. ຖ້າສີດທາດນັ້ນໃສ່ກະຕ່າຍແລ້ວເລືອດກັ່ນຂອງກະຕ່າຍຈະກາຍມາມີຄວາມສາມາດ ຕ້ານກັບອະນຸພາບຂອງວິຣຸດຕົ້ນຫນາມໄດ້. ເຊມຸຍແອນ ເອີຍ ເລືອດກັ່ນນັ້ນຈະປົວເຈົ້າໃຫ້ຫາຍຈາກພະຍາດຢ່າງສົມບູນ...

- ຂອບໃຈທ່ານ! - ຂ້າພະເຈົ້າເວົ້າດ້ວຍຄວາມປິ້ມໃຈ. - ຄັນຊັ້ນຂ້າພະເຈົ້າກໍຈະພະຍາຍາມຊ່ວຍທ່ານຈົນສຸດຄວາມສາມາດເພື່ອເອົາເລືອດກັ່ນນັ້ນມາຈົນໄດ້.

ມື້ນັ້ນ ຂ້າພະເຈົ້າເຮັດວຽກຢ່າງຂະຫຍັນຫັນຫ້າວ.

ຕອນກິນເຂົ້າທ່ຽງ, ຂ້າພະເຈົ້າໄດ້ຖາມ ໂດບີ ວ່າ:

- ເພື່ອນຜູ້ທ່ານເລົ່າເຖິງນັ້ນພົບກັບໄພພິບັດແນວໃດລະ, ທ່ານ?

ໂດບີ ຫັນໃຈຍາວຢ່າງໂສກເສົ້າ.

- ແຕ່ນັ້ນມາຂ້ອຍກໍບໍ່ໄດ້ພົບລາວອີກ. ຂ້ອຍໄດ້ອ່ານບົດໜັງສືພິມເຊິ່ງສະແດງໃຫ້ເຫັນວ່າດອກເຕີໜຸ່ມຊາວອາເມລິກາຄົນນີ້ມີຄວາມສາມາດສູງ. ແຕ່ມໍ່ໆມານີ້ມີຂ່າວວ່າລາວຖືກຄົນໃຊ້ຂອງຕົນຂ້າຢູ່ທີ່ແມັກຊິກ...

- ສາດສະດາຈານໂຣນເຊີ? - ຂ້າພະເຈົ້າພຶມພຳ.

- ໂອ, ເຈົ້າກໍຮູ້ຈັກກັບລາວຫວະ? - ໂດບີ ເຮັດຕາຫີບເຂົ້າ.

- ບໍ່ດອກ!...ຂ້າພະເຈົ້າພຽງແຕ່ໄດ້ອ່ານໃນໜ້າໜັງສືພິມກ່ຽວກັບຄະດີຄາດຕະກຳເລິກລັບຢູ່ ຊາມາດລານ ເທົ່ານັ້ນ...

ຂ້າພະເຈົ້າແກ້ງເວົ້າເສືອກຊື່ຂອງຕົວເມືອງ ມາຊາດລານ, ແລະກໍຕ້ອງພະຍາຍາມສຸດຂີດຈຶ່ງກັ້ນຄວາມກະຕຸ້ນໃຈທີ່ພວມກຶມກ້ວມຢູ່ໃນວິນຍານຂອງຂ້າພະເຈົ້າໄວ້ໄດ້.

## ຕອນທີ່ສິບ

### I

ຄວາມວິຕົກກັງວົນຕິດຕາມຂ້າພະເຈົ້າຢູ່ຕະຫລອດ. ເຫດການເລິກລັບຕ່າງໆທີ່ເກີດຂຶ້ນໃນຄືນທີ່ມີຄົນລັກສ່ອງເບິ່ງຂ້າພະເຈົ້າຢູ່ໃນຫ້ອງນັ້ນມັນໝາຍຄວາມວ່າຈັ່ງໃດ? ເປັນຫຍັງ ໂດບີ ຈຶ່ງມີທ່າທາງຜິດຫວັງ ເມື່ອເຫັນຂ້າພະເຈົ້າຖືກຈັບຢູ່ກ້ອງຮົ່ມຕົ້ນກໍ່ນັ້ນ? ອີກບໍ່ພໍ ໂດບີ ຊ້ຳຍັງລົງເຄີຍກັບມື້ລາງສາດສະດາຈານ ໂຣນເຊີ ນຳອີກ, ເລື່ອງນີ້ມັນແປກປະຫລາດທີ່ສຸດ. ບາງທີອາດຈະບໍ່ແມ່ນໂດບີທີ່ເປັນຜູ້ຄົ້ນພົບ ວິຣຸດຢູ່ໃນ "ຕົ້ນໜາມຂອງຊາວບູສະແມນ", ແຕ່ມັນແມ່ນໂຣນເຊີຜູ້ເຄາະຮ້າຍ, ບຸກຄົນຜູ້ເຊິ່ງເສຍຊີວິດໃນເວລາຕໍ່ມານັ້ນເອງ... ຖ້າຫາກເປັນເຊັ່ນນັ້ນແທ້...

ເຖິງຢ່າງໃດກໍຕາມ, ເຮັດວຽກຢູ່ໃນຫ້ອງທົດລອງນັ້ນ ມັນກໍເປັນເລື່ອງທີ່ໜ້າສົນໃຈຢ່າງຍິ່ງ.

ບໍ່ພໍເທົ່າໃດມື້ ພວກເຮົາກໍແຍກເຫລົ້າເກົ້າສິບອອກຈາກທາດແອ້ໄດ້, ແລະໃນທີ່ສຸດໂດບີກໍທ້ອນໂຮມໄດ້ທາດຢາງນ້ຳມັນໜານຽວສີຊ້ຳເກືອບໜຶ່ງ ອຸນກໍ* ຢູ່ໃນກົ້ນປຸ້ງແກ້ວ.

---

*ອຸນກໍ: ຫົວໜ່ວຍຊັ່ງຢາເທົ່າກັບ: ໒໘, ໓ ກຣາມ.

- ບໍ່ທັນແລ້ວເທື່ອໃດນີ, - ເພິ່ນເວົ້າທັງແນມເບິ່ງຜະລິດຕະພັນທີ່ເກັບກຳເອົາມາໄດ້ນັ້ນນຳ. - ຢູ່ນີ້ ວີຣຸດຍັງນອນປົນຢູ່ກັບທາດໂປຣຕີນອື່ນຈຳນວນຫນຶ່ງ. ຈະຕ້ອງແຍກມັນອອກມາ.

ອີກເທື່ອຫນຶ່ງຜະລິດຕະພັນນັ້ນກືກນຳມາປົນກັບຢາທົດລອງ, ແລ້ວນ້ຳ ກົ່ນ ກໍກືກນຳມາກັ່ນຕອງແລ້ວເອົາເຂົ້າໃສ່ເຄື່ອງຈັກແຍກສູນ.

ເຄື່ອງຈັກແຍກສູນຂອງ ໂດບີ ປິ່ນດ້ວຍຄວາມໄວຫົກສິບພັນຮອບຕໍ່ນາທີ, ຫລັງຈາກປ່ອຍໃຫ້ເຄື່ອງຈັກທຳງານມາເປັນເວລາສາມຊົ່ວໂມງລຽນຕິດແລ້ວ ໂດບີ ຈຶ່ງປິດຄັນອ້າວ ແລະເອົາຫລອດແກ້ວອອກມາຈາກເຄື່ອງຈັກນັ້ນ.

- ນັ້ນແມ່ນ ວີຣຸດ ສິດໆ! - ໂດບີ ເວົ້າດ້ວຍຄວາມປິ້ມໃຈແລະຈັບເອົາຫລອດແກ້ວນັ້ນຂຶ້ນມາ. - ເຈົ້າເບິ່ງແມະນີ້.

ທາດແປ້ງຢາງກອກຊະນິດຫນຶ່ງມີສີເຫລືອງອ່ອນຈີມຢູ່ພື້ນຂອງຫລອດແກ້ວ.

ເຂັມຂອງຊີງໄຟຟ້າທີ່ມີລະດັບເຫນັງຕຶງລະອຽດນັ້ນຊີ້ໃສ່ຕົວເລກ: ໑໔,໕໕໗໐໑

- ພວກເຮົາຈະລົບນ້ຳຫນັກຂອງຫລອດແກ້ວອອກ, - ໂດບີ ເວົ້າ. - ມັນເທົ່າກັບ ໑໔,໕໕ ກຣາມ. ພວກເຮົາຈະແປງຕົວເລກອັນນີ້ໂດຍອີງໃສ່ລະດັບຊຸ່ມ, ແລະຄວາມດັນຂອງອາກາດອີກ. - ເພິ່ນເຮັດຕາຫີບເຂົ້າຫນ້ອຍຫນຶ່ງແລ້ວເວົ້າຕໍ່: - ໄດ້ ວີຣຸດທີ່ບໍລິສຸດ ເກືອບສິບຫ້າມິລີກຣາມ. ເຈົ້າໄປເອົາກະຕ່າຍຢູ່ຄອກເບີເກົ້າຂຶ້ນມານີ້ຫັກໂຕເດີ.

ເຄິ່ງຊົ່ວໂມງຕໍ່ມາ, ຂ້າພະເຈົ້າກໍຫງວຫົວຫູກະຕ່າຍເຂົ້າໄປໃຫ້ ໂດບີ. ເພິ່ນທັນໄດ້ປົນວີຣຸດຈຳນວນຫນຶ່ງກັບນ້ຳກັ່ນສີລະສາດ ແລະໃຊ້ຊີແລ້ງສີດໃສ່ກະຕ່າຍແລ້ວ. ນ້ຳກັ່ນທີ່ຍັງເຫລືອຢູ່ໃນປຸ້ງແກ້ວນັ້ນກໍກືກນຳເຂົ້າໄປໃນເຄື່ອງປັບອາກາດ. ຂ້າພະເຈົ້າໄດ້ຕະກຽງ ບຸນແຊນ* ໂດບີ ຈອດອັດຫລອດແກ້ວບັນຈຸວີຣຸດນັ້ນໄວ້ ດ້ວຍຄວາມລະມັດລະວັງ ແລະເອົາເຂົ້າໄວ້ໃນບ່ອນເກັບມັງຽນຕົວຢ່າງວີຣຸດຂອງຕົນ.

ມືຂອງເພິ່ນສັ່ນໆໃນຂະນະທີ່ໃຊ້ສໍທີ່ເຮັດດ້ວຍໄຂຂຽນໃສ່ຫລອດແກ້ວນັ້ນ: "ຕົ້ນຫນາມຂອງຊາວບູສະແມນ. ເວ. ໑໘"

- ເຊມຸຍແອນ, ດຽວນີ້ ຂ້ອຍຈຶ່ງສະບາຍໃຈໄດ້, - ໂດບີ ເວົ້າອອກມາດ້ວຍທ່າທາງສະ

---

*ບຸນແຊນ: ຕະກຽງສຳລັບຈອດທີ່ໃຊ້ຢູ່ໃນຫ້ອງທົດລອງຂະຫນາດນ້ອຍ.

ບາຍອາລິນຍິ່ງ. - ປະລິມານວິຣຸດ ທີ່ຂ້ອຍເອົາມາໄດ້ໃນເມື່ອກ່ອນນີ້ໃຊ້ເຂົ້າໃນການທົດລອງໝົດແລ້ວ. ແຕ່ແລ້ວຂ້ອຍຊ້ຳຕ້ອງການມີປະມວນວັດຖຸຕົວຢ່າງຂອງວິຣຸດທີ່ມີວິຣຸດຕ່າງໆຢ່າງພຽງພໍ. ແລ້ວກໍຍັງຕ້ອງຊ່ວຍເຈົ້າອີກ. ຫວ່າງຍ່ານີ້, ຂ້ອຍໄດ້ຮັບໝາກໄມ້ຫນາມທີ່ສົ່ງມາຈາກອູໂກໂກ ໂດຍຜ່ານຫ້ອງການພານິດທີ່ ອາຟລິກກາກາງ.

- ເພື່ອເຮັດວຽກນີ້ ທ່ານຕ້ອງຈ່າຍເງິນຫລາຍບໍ່? - ຂ້າພະເຈົ້າຖາມ.

ໂດບີ ແນມເບິ່ງຂ້າພະເຈົ້າດ້ວຍທ່າທາງທີ່ຂ້າພະເຈົ້າເຄີຍຊື່ນຊົມມາກ່ອນ.

- ເອີ... ເມື່ອໄດ້ລົງມືເຮັດວຽກກ່ຽວກັບວິທະຍາສາດແລ້ວ ຢ່າໄດ້ຄິດໄລ່ເຖິງການໃຊ້ຈ່າຍ... - ເພິ່ນເວົ້າຕື່ມ: ສຳລັບວິທະຍາສາດແລ້ວຈະໄປເສຍດາຍເຫື່ອແຮງແລະຊັບສິນສົມບັດແມ່ນບໍ່ໄດ້ເດັດຂາດ. ຫລັງຈາກສີດວິຣຸດໃຫ້ກະຕ່າຍເປັນເວລາອາທິດຫນຶ່ງລວມຕົດແລ້ວ, ເລືອດກັ່ນກະຕ່າຍຈະສະສົມທາດຕ້ານວິຣຸດໄວ້ໄດ້ແລະຈະຜະລິດຢາໃຫມ່ ອອກມາປົວພະຍາດໃຫ້ເຈົ້າ.

- ທ່ານ, ຈັ່ງຊັ້ນມັນກໍວິເສດລະຕິ, - ຂ້າພະເຈົ້າຕອບ. - ເປັນອັນວ່າ ກິດຈະກຳຂອງທ່ານຈະໄດ້ທົດລອງຄືນໂດຍຜ່ານຮ່າງກາຍຂອງຂ້າພະເຈົ້າເອງ. ຂໍເວົ້າວ່າກ່ອນນີ້ຂ້າພະເຈົ້າກໍເຄີຍຄຶດຢາກຈະປະກອບສ່ວນເຂົ້າໃນການທົດລອງແບບນີ້.

- ເອີ...ຈັ່ງຊັ້ນຫວະ?

- ເຈົ້າ, ທ່ານ. ທ່ານລໍເດີ ປາກລິນເຕີນ ຢູ່ຜາສາດ ໂອນມາອູນ...

- ເອີ, ອີດາເຮັດວຽກວິທະຍາສາດແບບສະຫມັກຫລິ້ນຜູ້ທີ່ບໍ່ເປັນຕາສາເຫດທີ່ຖືກເນລະເທດໄປຈາກລາຊະອານາຈັກນັ້ນຕິເບາະ? - ໂດບີ ຖາມ. - ເຈົ້າກໍຮູ້ຈັກກັບລາວຫວະ ?

- ບໍ່ດອກ ທ່ານ. ຂ້າພະເຈົ້າຍັງບໍ່ທັນເຫັນເພິ່ນນັ້ນຈັກເທື່ອ. ແຕ່ເລື່ອງຂອງມັນ...

- ເລື່ອງກ່ຽວກັບໂທດກຳຂອງລາວໂດ່ງດັງໄປທົ່ວພິພົບ, - ໂດບີເວົ້າດ້ວຍທ່າທີເຢາະເຢີ້ຍ. - ແລະລາວກໍຕາຍໄປຢ່າງຫນ້າສົມເພດກວ່າ ໂຣນເຊີຜູ້ເຄາະຮ້າຍນັ້ນເສຍອີກ.

- ສົມເພດກວ່າຜູ້ຖືກລອບຄາດຕະກຳພຸ້ນຫວະ? - ຂ້າພະເຈົ້າພຶມພຳ.

- ເອີ... ເລື່ອງນີ້ເຂົາເຈົ້າຕີພິມ ລົງໃນຫນັງສືພິມສະບັບຕ່າງໆ. ລາວທົນບໍ່ໄດ້ຕໍ່ຄວາມຊວຍ. ຫົວໃຈເລີຍແຕກຕາຍ.

- ເຮັດບາບລາວ! - ຂ້າພະເຈົ້າຕອບດ້ວຍຄວາມບໍລິສຸດໃຈ.

## II

ອາທິດໜຶ່ງຕໍ່ມາ, ເລືອດກັ່ນກໍ່ມີຢ່າງພຽງພໍແລ້ວ, ສ່ວນຂ້າພະເຈົ້າພາຍຫລັງທີ່ໄດ້ສັກຢາຕ້ານວິຣຸດທີ່ຫາກໍ່ພະລິດອອກມານັ້ນແລ້ວ ກໍ່ຄອງຄອຍຫມາກຜົນຂອງມັນຢູ່ດ້ວຍຄວາມຮ້ອນໃຈ.

ໂດບີໃຊ້ເວລາສ່ວນໃຫຍ່ນັ່ງຢູ່ທີ່ໂຕະເພື່ອສັບຊ້ອນຕົ້ນສະບັບທີ່ສຳຄັນຂອງຕົນ ຢູ່ໃນຫ້ອງເຮັດວຽກ. ເພິ່ນບໍ່ສູ້ມາເຮັດວຽກຢູ່ຫ້ອງທົດລອງ. ບາງຄັ້ງບາງຄາວຈຶ່ງມາກວດກາເບິ່ງວຽກງານທີ່ຂ້າພະເຈົ້າພວມເຮັດຢູ່.

ເພິ່ນສອນໃຫ້ຂ້າພະເຈົ້າຮູ້ຈັກວິທີກໍ່ສ້າງປະຕິກິລິຍາເຄມີ ໃນບັນດາທາດໂປຣຕີນທັງຫລາຍ, ແລະຂ້າພະເຈົ້າກໍ່ສາມາດເຮັດວຽກຫລໍ່ນັ້ນໄດ້ດີ.

- ເຊມຸຍແອນເອີຍ, ອະນາຄົດຂອງເຈົ້າໄດ້ຮັບການຄ້ຳປະກັນແລ້ວຫລະ, ວິທະຍາສາດບໍ່ພຽງແຕ່ຕ້ອງການບັນດາຜູ້ຮັບໃຊ້ຢູ່ໃນຫ້ອງທົດລອງເທົ່ານັ້ນ, ແຕ່ຍັງຕ້ອງການເກືອງຄົນທີ່ມັກທຳການທົດລອງຢ່າງມີຊີວິດຊີວາອີກດ້ວຍ. ການຄົ້ນຄວ້າ ວິຣຸດນີ້ມັນກວ້າງຂວາງຍິ່ງໃຫຍ່ທີ່ສຸດ. ທຸກໆຄົນທີ່ເຮັດວຽກກ່ຽວກັບການຄົ້ນຄວ້າວິຣຸດ ລ້ວນແຕ່ຈະມີຄວາມພາກພູມໃຈ ເມື່ອຜູ້ຊ່ວຍວຽກຄືເຈົ້າ.

ຂ້າພະເຈົ້າເລີ່ມມີຄວາມສົນໃຈໃນການຄົ້ນຄວ້າວິຣຸດ. ໂດບີ ຊ່ຽວຊານກ່ວາຫລາຍ ກ້າທຽບໃສ່ "ສາດສະດາຈານໆ" ເຊິ່ງໃນຂະນະນີ້ຂ້າພະເຈົ້າເຫັນວ່າລາວສົນໃຈນຳແຕ່ລາຍໄດ້ຂອງສຳນັກອັນສະຍົດສະຫຍອງຂອງລາວຫລາຍກ່ວາຢ່າງອື່ນ. ຜ່ານຈາກບົດບັນຍາຍຕ່າງໆຂອງ ໂດບີ ຂ້າພະເຈົ້າສາມາດເກັບກຳເອົາວິຊາຄວາມຮູ້ທາງດ້ານວິທະຍາສາດໄດ້ຢ່າງຫລວງຫລາຍ ແລະເປັນໜ້າສົນໃຈທີ່ສຸດ.

ການແຍກວິຣຸດອອກມາໃນລັກສະນະຢາງກອກໃສທີ່ບໍລິສຸດໄດ້ນັ້ນ ມັນຍັງເປັນເລື່ອງເລັກນ້ອຍເກີນໄປ. ໂດບີຍັງສາມາດຊອກວິທີປ່ຽນແປງລັກສະນະພິເສດຂອງມັນໄດ້ອີກດ້ວຍ.

- ເຊມຸຍແອນເອີຍ ວິຣຸດ ແມ່ນທາດໂປຣຕີນ, ນີເທື່ອໜຶ່ງ ໂດບີ ເວົ້າຂຶ້ນ-ມໍເລກູນຂອງທາດໂປຣຕີນ ຕາມຂ້ອຍຮູ້ ລວມມີແກ່ນສານແລະບັນດາຕ່ຽງຍອຍຢູ່ອ້ອມຂ້າງ. ແອເອີລິກ ເອງກໍ່ຄຶດວ່າມັນເປັນເຊັ່ນນີ້. ພວກມັນແມ່ນບັນດາຕ່ຽງຍອຍທີ່ມີປະຕິກິລິຍາ. ພວກມັນ

ແມ່ນທາດພື້ນຖານທີ່ເຮັດໃຫ້ມີທາດໂປຣຕີນຫລາຍຮູບແບບຈົນນັບບໍ່ຖ້ວນໃນທຳມະຊາດ ຊຶ່ງລ້ວນແຕ່ມີລັກສະນະພິເສດຄືມີການແລກປ່ຽນກັບສະພາບແວດລ້ອມອ້ອມຕົວມັນຢູ່ເປັນປົກກະຕິ. ຂ້ອຍເຄີຍຖາມຕົນເອງຢູ່ວ່າ: "ເຮົາຮູ້ຈັກການປະກອບສ້າງເຄມີຂອງຕ່ງຍອຍຕ່າງໆ, ເຮົາຮູ້ຈັກການປະກອບສ້າງມໍເລກູນຂອງວິຣຸດພະຍາດກະດັນຕາບົ້ງຂອງຕົ້ນຢາສູບແລ້ວ. ຄັນຊັ້ນລັກສະນະພິເສດຂອງການຕິດເຊື້ອວິຣຸດມັນຂຶ້ນກັບການມີຫນ້າຂອງຕ່ງຍອຍໃດ?" ຂ້ອຍຕັດຕ່ງຍອຍອັນຫນຶ່ງ. ແຕ່ວິຣຸດກໍ່ຄົງເປັນວິຣຸດຢູ່ຢ່າງສົມບູນ. ຫມາຍຄວາມວ່າແຫລ່ງຕິດເຊື້ອບໍ່ຂຶ້ນກັບຕ່ງຍອຍນີ້. ຂ້ອຍໄດ້ທົດລອງຫລໍາໄປຫລໍາມາໃນຫລາຍໆກໍລະນີແລ້ວ, ແລະໃນທີ່ສຸດເຫດການເປັນໄປກໍບໍ່ເກີດຂຶ້ນຈະສັບສົນຄືຂ້ອຍຄິດເອົາໄວ້. ຢູ່ໃນແຕ່ລະວິຣຸດນັ້ນມີຕ່ງຍອຍອັນຫນຶ່ງເຊິ່ງຂ້ອຍເອີ້ນວ່າ ຕ່ງຍອຍກາຝາກ. ຜ່ານຕ່ງຍອຍອັນນີ້ ມໍເລກູນຂອງວິຣຸດ ສາມາດທໍາການແລກປ່ຽນກັບສະພາບແວດລ້ອມທາງນອກໄດ້ງ່າຍດາຍກວ່າ, ມັນບໍ່ພຽງແຕ່ໄດ້ເລືອກເອົາທາດປົກຍ່ອຍຈາກສະພາບແວດລ້ອມເທົ່ານັ້ນ ແຕ່ຍັງສາມາດເຕົ້າໂຮມເອົາພາກສ່ວນໃຫຍ່ຂອງມໍເລກູນໂປຣຕີນອີກດ້ວຍ. ແຕ່ເພື່ອເຮັດວຽກນີ້ໄດ້ ມໍເລກູນວິຣຸດຈະຕ້ອງທຳລາຍມໍເລກູນຂອງທາດໂປຣຕີນອື່ນທີ່ບໍ່ແມ່ນວິຣຸດດັ່ງທີ່ພວກເຮົາເຄີຍເຫັນຢູ່ໃນທຳມະຊາດນັ້ນໃຫ້ໄດ້. ຫ້ອງລ້ຽງສັດທົດລອງຂອງຂ້ອຍ ມັນລວມມີທັງສັດທີ່ຂ້ອຍພວມໃຊ້ເພື່ອທົດລອງລັກສະນະຂອງວິຣຸດທີ່ຖືກປ່ຽນແປງດ້ວຍວິທີແຕກຕ່າງກັນ. ທຸກສິ່ງທຸກຢ່າງມັນເປັນເຊັ່ນນັ້ນແລ້ວ ...

- ຂໍໂທດທ່ານ, - ຂ້າພະເຈົ້າເວົ້າສອດຂຶ້ນໃນຂະນະທີ່ຄັນຄິດກ່ຽວກັບສິ່ງທີ່ ໂດບີ ເວົ້າອອກມານັ້ນ, - ທ່ານຫາກໍເວົ້າເຖິງມໍເລກູນ, ເຖິງບັນດາຕ່ງຍອຍ. ທ່ານເວົ້າປານວ່າທ່ານແນມເຫັນພວກມັນນີ້ລະ. ບໍ່ວ່າຕິວ່າຊິແນມເຫັນມັນໄດ້?...

- ແນມ ເຫັນລະຕິ, - ໂດບີ ຕອບຢ່າງເຄັ່ງຂຶມ, - ບໍ່ແມ່ນດ້ວຍກ້ອງຈຸລະທັດທຳມະດາ ແຕ່ເບິ່ງມັນດ້ວຍເຄື່ອງຈັກພິເສດອັນຫນຶ່ງ. ມັນຢູ່ນີ້ເດ.

ໂດບີຍ່າງໄປຫາຕູ້ທີ່ຕັ້ງຢູ່ເທິງເຄື່ອງຈັກແຍກສູນນັ້ນ ແລ້ວໄຂຝາຕູ້ທີ່ມີຕົວອັກສອນ "ເອີແອມ". ນັ້ນອອກມາ.

ໃນຕູ້ມີເຄື່ອງຈັກໃຫຍ່ອັນຫນຶ່ງເຊິ່ງມີກັບຫໍ່ຫຸ້ມໄວ້ເປັນຢ່າງດີ.

- ເຊມຸຍແອນ, ຕໍ່ຫນ້າຂອງເຈົ້ານັ້ນແມ່ນກ້ອງຈຸລະທັດ ເອເລັກໂຕຣນິກ. ຄົນແສງສະ

ຫວ່າງທີ່ໜຶກເກີນໄປຈະເຮັດໃຫ້ແສງຕາຂອງເຮົາບໍ່ສາມາດແນມເຫັນບັນດານໍເລກູນ ຂອງທາດໂປຣຕີນໄດ້. ແຕ່ກ້າພວກເຮົາໃຊ້ກະແສ ເອເລັກຕຣິງ ແທນລັງສີແສງສະຫວ່າງແລ້ວ ພວກມັນກໍຈະເຮັດໃຫ້ພວກເຮົາແນມເຫັນເງົາສະທ້ອນຂອງບັນດານໍເລກູນທີ່ຢູ່ໃນວັດຖຸທົດລອງເຊິ່ງມັນກືກຂະຫຍາຍຂະໜາດອອກມາຕາມມາດຕາສ່ວນນັ້ນ ປະກົດຕົວຂຶ້ນມາຢູ່ເທິງພິມຮູບໄດ້. ແລະດ້ວຍວິທີຂ້າງຄຽງກັນນີ້ ເຂົາເຈົ້າໄດ້ໃຊ້ກຳມັນຕະພາບລັງສີ ເພື່ອໃຫ້ມີຮູບພາບການສັບຊ້ອນຂອງປະລາມະນູຢູ່ໃນຮູບຮ່າງຂອງຢາງກອກໃສ. ເມື່ອເວົ້າເຖິງໂຄງສ້າງກ້ອງຈຸລະທັດ ເອເລັກໂຕຣນິກແລ້ວ ມັນບໍ່ມີຫຍັງສັບສົນກ່ວານັ້ນເລີຍ.

ໂດບີ ໄຂກັບເຄື່ອງຈັກແລ້ວເອົາມັນມາຕັ້ງໃສ່ໂຕະທົດຂອງ. ເພິ່ນເວົ້າວ່າ:

- ຂ້ອຍເອົາປະລິມານ ວິຣຸດ ຈຳນວນນ້ອຍໆ, ວາງໃສ່ເທິງປ່ຽງແຊລອຍດິນ ແລ້ວເອົາປ່ຽງດັ່ງກ່າວ, ເຂົ້າໃນຫ້ອງລຸ່ມນີ້. - ໂດບີ ຊີ້ໃຫ້ຂ້າພະເຈົ້າເບິ່ງຫ້ອງໜຶ່ງ. - ຫລັງຈາກນັ້ນຂ້ອຍອັດມັນໄວ້ແຈບໆແລ້ວໄຂເຄື່ອງກົດອາກາດ. - ມັນຈະສູບອາກາດອອກຈາກຫ້ອງທີ່ກືກອັດແຈບນັ້ນໝົດເພື່ອບໍ່ໃຫ້ມີສິ່ງໃດກໍ່ພົບສະທ້ອນໃຫ້ແກ່ກະແສໄຟຟ້າທີ່ແລ່ນຜ່ານຫ້ອງນັ້ນ. ບໍ່ດັ່ງນັ້ນ ນໍເລກູນຂອງອາກາດຈະເຮັດໃຫ້ຮູບພາບເກີດການຜິດພາດໄປ. ນີ້ເດີ, ຂ້ອຍເອົາກັບຟິດບັນຈຸພິມຮູບເຂົ້າໄປນີ້. - ໂດບີຊີ້ໃຫ້ຂ້າພະເຈົ້າເບິ່ງ. - ຈຸດສູນຂອງແສງລັດສະໝີໄດ້ຮັບການວັດແທກໄວ້ກ່ອນແລ້ວຢ່າງຊັດເຈນ. ເມື່ອໄດ້ຈັດວາງເຂົ້າຮູບເຂົ້າຮອຍຄັກແນ່ແລ້ວ ກໍປິດກະແສໄຟຟ້າໄວ້. ກະແສໄຟຟ້າ ເມື່ອເລີ່ມປະຕິບັດງານແລ້ວຈະສ້າງສະໜາມແມ່ເຫລັກອັນໜຶ່ງຂຶ້ນມາ ກະແສເອເລັກຕຣິງຈະແລ່ນໄປຍັງທົດໜຶ່ງທີ່ໄດ້ກຳນົດໄວ້ແລ້ວ. ພວກມັນຈະແລ່ນຜ່ານວັດຖຸທົດລອງ, ຫລັງຈາກນັ້ນ ກໍແລ່ນຜ່ານສະໜາມແມ່ເຫລັກແລະສາຍພາບຂອງການປະກອບສ້າງຂອງວິຣຸດອະພິຈຸລະທັດທີ່ນ້ອຍທີ່ສຸດນັ້ນອອກມາ, ໝາຍຄວາມວ່າສາຍພາບຂອງນໍເລກູນຂອງມັນໃສ່ພິມຮູບ. ໄລຍະປະກົດຕົວຕໍ່ແສງສະຫວ່າງດົນບໍ່ເກີນສິບວິນາທີ. ຂ້ອຍຕັດກະແສໄຟຟ້າ. ດຽວນີ້ຍັງແຕ່ຈະລ້າງພິມ, ຫລັງຈາກນັ້ນກໍອັດຮູບ...

ດ້ວຍນ້ຳໃຈເຄົາລົບຢຳເກງຢ່າງຍິ່ງ, ຂ້າພະເຈົ້າແນມເບິ່ງເຄື່ອງຈັກ "ເອີແອມ" - ຜົນສຳເລັດອັນລ້ຳເລີດທາງດ້ານວິທະຍາສາດນັ້ນ.

- ບໍ່ແມ່ນຂ້ອຍເປັນຜູ້ປະດິດຄິດແຕ່ງກ້ອງຈຸລະທັດເອເລັກຕຣິງນີ້ດອກ. ແຕ່ດ້ວຍການຊີ້ນຳ

ຂອງຂ້ອຍ, ການປະກອບສ້າງຂອງເຄື່ອງຈັກນີ້ຈຶ່ງງ່າຍດາຍ, - ໂດບີ ເວົ້າຕື່ມດ້ວຍຄວາມກ່ອມຕົວ. - ເອີ, ນີ...ໂດບີ ກອດເອົາຮູບສອງສາມແຜ່ນອອກຈາກລິ້ນຊັກໂຕະໃຫ້ຂ້າພະເຈົ້າເບິ່ງ: - ເຈົ້າເບິ່ງແມະ. ຮູບຂອງ ມໍເລກູນວິຣຸດໃດຫັ້ນ. ນີ້ແມ່ນ ມໍເລກູນວິຣຸດຂອງພະຍາດກະດັນຕາບົ້ງຕົ້ນຢາສູບ. ເຈົ້າເຫັນບໍ່, ພວກມັນຄືກັບດົ້ວນ້ອຍໆນີ້ລະ. ບັນດາຫົວແຫລມໆຂອງພວກມັນເກາະກັນເປັນສາຍຍາວໆ. ການຄິດໄລ່ໃນຫ້ອງທົດລອງສະແດງໃຫ້ເຫັນວ່າ ນ້ຳໜັກປະລາມະນູຂອງ ມໍເລກູນວິຣຸດຈຳນວນຫລາຍແມ່ນໃຫຍ່ທີ່ສຸດ, ມີຕັ້ງລ້ານຈຸລັນພຸ້ນ.

ຂ້າພະເຈົ້າແນມເບິ່ງຮູບ. ຄັນຊັ້ນບັນຫາຂອງພະຍາດກະດັນຕາບົ້ງມັນຢູ່ໃສລະ! ຫັ້ນ, ມັນຕັ້ງແມ່ນດົ້ວນ້ອຍໆເຫລົ່ານັ້ນເອງທີ່ນຳເອົາພະຍາດຕິດແປດມາໃຫ້ແກ່ຕົ້ນໄມ້ຢູ່ໃນນິຄົມຕ່າງໆ ທີ່ອີນເດຍ, ໄດ້ເຮັດໃຫ້ໃບຢາຕາຍເປັນປ່າມໆ ແລະເຮັດໃຫ້ລຳຕົ້ນຂອງມັນເປັນກະດັນ ...

ວິທະຍາສາດໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມອັດສະຈັນນຳຄວາມຍິ່ງໃຫຍ່ຂອງມັນ ທີ່ໄດ້ສະຫລັກຮ່ອງຮອຍໄວ້ບົນແຜ່ນພາບເຫລົ່ານີ້. ຂະນະນີ້, ສຳລັບຂ້າພະເຈົ້າແລ້ວ, ເສັ້ນທາງຫາລັ້ງລິບສ່ວນຕົວດ້ວຍການໂດດເຕັ້ນຢູ່ເທິງເວທີສະແດງ ແລະການຊອກສະແຫວງຫາບັນດາປະເທດຊາດອັນແປກປະຫລາດທີ່ມີວັດຖຸອັນລ້ຳຄ່າແປກປະຫລາດຫລາຍຢ່າງນັ້ນ ມັນກາຍເປັນເລື່ອງຕ່ຳຕ້ອຍໄປຍິ່ງເສຍແລ້ວ!

ຂ້າພະເຈົ້າເບິ່ງຮູບເຫລົ່ານັ້ນຄືນອີກຄັ້ງໜຶ່ງ ແລ້ວຊ່ວຍ ໂດບີ ເອົາເຄື່ອງຈັກ "ເອີແອມ" ເຂົ້າ, ຈາກນັ້ນຈຶ່ງນຳເອົາມັນເຂົ້າໄປໄວ້ໃນຕູ້.

## III

ຢູ່ໃນຄອກເບີຫົກແມ່ນແມວ, ໃນຄອກເບີເຈັດແມ່ນຝູງໜູນາພານນ້ອຍຂາໂຂງ. ສ່ວນພວກທີ່ຢູ່ໃນຄອກເບີແປດນັ້ນ ແມ່ນຊຸມໜູນາຫາງຍຸງນ້ອຍຂົນດຳ.

ຂ້າພະເຈົ້າຈື່ໄດ້ວ່າ, ພາຍຫລັງທີ່ໄດ້ທຳຄວາມລຶ້ງເຄີຍກັບເຄື່ອງ "ເອີແອມ" ນັ້ນແລ້ວ ຂ້າພະເຈົ້າກໍໄປຫ້ອງລ້ຽງສັດ ເພື່ອເບິ່ງວ່າຝູງກະຕ່າຍຂອງຂ້າພະເຈົ້າຢູ່ກິນແນວໃດ. ອີກມື້ໜຶ່ງຂ້າພະເຈົ້າກໍຈະໄດ້ສີດຢາເຂັມສຸດທ້າຍແລ້ວ. ແວ່ນດວງນັ້ນໄດ້ບອກກັບຂ້າພະເຈົ້າວ່າ ຂະນະນີ້ຮູບຮ່າງທາງນອກຂອງຂ້າພະເຈົ້າຍັງບໍ່ທັນມີຫຍັງປ່ຽນແປງໄປເປັນພິເສດເທື່ອ.

ຝູງກະຕ່າຍເຫລົ່ານັ້ນກໍຄືງຄັງວກິນຫຍ້າທີ່ຂ້າພະເຈົ້າຕັດຈາກທົ່ງນັ້ນມາໃຫ້ມັນຢູ່, ແລະກໍບໍ່ມີປະກົດການຜິດປົກກະຕິຫຍັງເກີດຂຶ້ນເທື່ອ.

ທັນໃດນັ້ນ ຂ້າພະເຈົ້າກໍໄດ້ຍິນສຽງແມວງຮ້ອງດັງຂຶ້ນຢ່າງແປກປະຫລາດ. ຂ້າພະເຈົ້າໄປຫາຄອກລັງງແມວ. ພວກແມວຊໍ້ານອນສະຫງົບຢູ່. ແຕ່ມັນແປກອີ່ຫລີ - ສຽງຮ້ອງແມວງນັ້ນຍັງຄືງດັງຂຶ້ນຕໍ່ໄປ. ແມ່ນພວກຫມາຂາໂຂງພຸ້ນທີ່ຮອງແມວງ! ຂ້າພະເຈົ້າຢືນສັງເກດເບິ່ງສັດຢູ່ໃນຄອກເບີເຈັດດ້ວຍຄວາມແປກໃຈຍິ່ງ. ຫມາໂຕຫນຶ່ງພວມນັ່ງເຕັງສອງຂາຫລັງ ແລະເອົາສອງຂາຫນ້າລູບຫນ້າຕົນເອງຢູ່.

- ໂອະ-ໂອະ, - ຂ້າພະເຈົ້າເອີ້ນໃສ່ມັນແລະເອົາຕີນເຕາະໆໃສ່ດົ່ວຄອກເຫລັກ.

ເລື່ອງນັ້ນມັນເຮັດໃຫ້ພວກແມວທີ່ຢູ່ໃນຄອກຂ້າງນັ້ນຕື່ນຂຶ້ນ, ແລະພວກມັນກໍເຫົາໂຫ້ງ, ຕະພຶດຂຶ້ນ. ແຕ່ພວກມັນກໍຍັງບໍ່ທັນເຫົາຄືກັບສຽງຫມາອ້ອຍຕ້ອຍເທື່ອດອກ. ແຕ່ເຖິງຢ່າງໃດນັ້ນແມ່ນສຽງເຫົາຢູ່ນັ້ນເອງ.

"ແປກເອີຍ, - ຂ້າພະເຈົ້າຄຶດ. - ແຕ່ອັນນັ້ນ ມັນເປັນພຽງແຕ່ຫມາກຜົນຂອງ ວິຊຸດທີ່ກຶກປ່ຽນແປງເທົ່ານັ້ນດອກ. ຄວນຊິແລ່ນໄປບອກໃຫ້ ໂດບີ ຮູ້ຈັກ..."

ແຕ່ຄວາມຄຶດອັນຫນຶ່ງພາໃຫ້ຂ້າພະເຈົ້າຕ້ອງຢຸດ.

"ບາດຫາ ຄົນຜູ້ນັ້ນເປັນຄົນຫລອກລວງແລະລາວກືວ່າຂ້າພະເຈົ້າເອງກໍເປັນແຕ່ພຽງສັດທົດລອງໂຕຫນຶ່ງເທົ່ານັ້ນເດລະ? ແລະບັງເອີນຂ້າພະເຈົ້າເອງກໍຮ້ອງແມວງຂຶ້ນເດລະ?

ຂ້າພະເຈົ້າເລີ່ມມີຄວາມຢ້ານກົວຂຶ້ນມາເຖິງຂັ້ນວ່າ ການເຂົ້າໄປນອນຢູ່ໃນຈັກຍິງສິ່ງເພື່ອບິນອູດຂຶ້ນສູ່ກາງຫາວນັ້ນເປັນພຽງແຕ່ເລື່ອງຂີ້ຜອຍເທົ່ານັ້ນ.

ຂ້າພະເຈົ້າຮູ້ສຶກວ່າ ຫນ້າຂອງແມວກັບກາຍມາຄ້າຍຄືກັບຫນ້າຫມາໄປ. ເພື່ອເບິ່ງໃຫ້ມັນປະຈັກແຈ້ງອີກ. ຂ້າພະເຈົ້າໄດ້ໄຂປະຕູຄອກອອກ. ແຕ່ປະກົດວ່າພວກສັດເຫລົ່ານັ້ນກໍກໍາລັງຄອງຄອຍນາທີນັ້ນຢູ່. ພວກແມວຮ້ອງຂຶ້ນດ້ວຍຄວາມມ່ວນຊື່ນ, ເຫົາເປັນສຽງແມວທີ່ແປກປະຫລາດແລ້ວເຕັ້ນຍ້ອດອອກຈາກຄອກໄປ. ຍ້ອນກະວ່າຊິຄຸບເອົາມັນໄວ້ແຕ່ ຂ້າພະເຈົ້າຊໍ້າເຮັດໃຫ້ຄອກຫມາຂວໍ້າໄປອີກ, ປະຕູຄອກໄຂລະອອກ...

- ລຸງ ມີກລີ! ຊ່ວຍຂ້ອຍແດ່! ຂ້າພະເຈົ້າທັງແລ່ນອອກຈາກຫ້ອງລັງງສັດທັງຮ້ອງລັ່ນຂຶ້ນ.

ໂດບີ ແລະພໍ່ຄົວແລ່ນມາ. ຂ້າພະເຈົ້າກັ້ນໃຈ, ເລົ່າເລື່ອງທີ່ເກີດຂຶ້ນນັ້ນຄືນທັງຫມົດ.

- ເຂົ້າໄປໃນເຮືອນສາ! - ໂດບີ ຮ້າຍຂ້າພະເຈົ້າ. - ມື້ນີ້ ລຸງ ມິກລີໄດ້ເຮັດຕາມຄຳສັ່ງຂອງຂ້ອຍ ຄືໄດ້ຕັ້ງຄອກສັດເຫລົ່ານີ້ຄືນໃຫມ່ຫມົດແລ້ວ.

- ທ່ານ, ຖືກຕ້ອງຄືວ່າຫັ້ນແຫລະ, - ລຸງ ມິກລີຢືນຢັນ. - ບັກເຊມຸຍແອນນີ້ ມັນປັ້ນເລື່ອງຂຶ້ນເກ່ງອີ່ຫລີ. ຂ້າພະເຈົ້າກ້າສາບານວ່າມັນຕັ້ງເປັນພະຍາດຫລັບຍ່າງແທ້ລະ.

- ຫນີອອກໄປ, ໄດ້ຍິນບໍ່? - ໂດບີອອກຄຳສັ່ງ. - ຂ້ອຍຈະຈັດແຈງພວກສັດໃນຄອກເຫຼົ່ານີ້ເອົາເອງ.

- ແຕ່ ທ່ານ, ຂ້າພະເຈົ້າຂໍຢັ້ງຢືນພວກແມວມັນເທົ່າແທ້...- ຂ້າພະເຈົ້າເວົ້າແບບຢຸດໆຢ່ອນໆ.

- ຫນີໄປ! - ໂດບີ ແຜດຂຶ້ນ. - ອີງຕາມສັນຍາເຈົ້າຄວນຈະຖືກລົງໂທດເພາະຜ່າຝືນ.

ຂ້າພະເຈົ້າຖອຍອອກຈາກຫ້ອງລ້ຽງສັດໄປດ້ວຍຄວາມຫງ່ອມເຫງົາ.

"ບໍ່ວ່າຕີ, ທຸກສິ່ງທຸກຢ່າງມັນເປັນພຽງແຕ່ປະສາດຫລອນເທົ່ານັ້ນ? - ຂ້າພະເຈົ້າຄຶດຢູ່ດ້ວຍຄວາມລຳຄານໃນຂະນະ ທີ່ພວມແກ້ຫລອດແກ້ວທົດລອງອອກຈາກເຄື່ອງແຍກສູນແລະໃຊ້ແປງເຊັດພວກມັນໃຫ້ສະອາດນັ້ນ. - ໄດ້! ມື້ອື່ນສີດຢາຕ້ານວິຣຸດ ເຂັມສຸດທ້າຍແລ້ວ, ຂ້າພະເຈົ້າກໍຈະຂໍລາທ່ານໄປຕະຫລອດການ, ທ່ານໂດບີເອີຍ. ແຫນງສູ້ນັ່ງທ້ອງແຫ້ງຢູ່ ແອຊູໂອເຮີກໍຍັງດີກວ່ານັ່ງກິນອີ່ມກິນພີຢູ່ໃນຄະລີຫາດວິຣຸດເທິງດອຍກຸຫລາບຄູ່ຫລັງນີ້!

ໂດບີ ຍ່າງເຂົ້າຫ້ອງທົດລອງດ້ວຍບາດຕີນສີຫນັກໆແລະລ້າງມືຢູ່ບົກດົນໆ.

- ສັດໂຕທີ່ຈັບອົກຈັບໃຈທີ່ສຸດນັ້ນຫນີໄປສາແລ້ວ, - ເພິ່ນເວົ້າດ້ວຍຄວາມໂມໂຫ ໃນຂະນະທີ່ໃຊ້ແພເຊັດມືຢູ່. - ເຈົ້າມັນບໍ່ເປັນຕາສາເຫດອີ່ຫຍັງເລີຍ, ເຊມຸຍແອນ. ປົວໃຫ້ເຈົ້າດີພະຍາດແລ້ວພວກເຮົາຫາລະແຍກກັນສາ. ເຈົ້າເຮັດໃຫ້ຂ້ອຍວິຕົກເກີງຂັ້ນ...

- ທ່ານ, ຂໍທ່ານຈົ່ງອະໄພໃຫ້ຂ້າພະເຈົ້າແດ່ເທາະ, - ຂ້າພະເຈົ້າເວົ້າຢ່າງແຫ້ງແລ້ງ.

ແຕ່ຄວາມໂມໂຫຂອງ ໂດບີ ໄດ້ເຢັນລົງແລ້ວ.

- ຢ່າເຮັດໃຫ້ຊຸມນີ້ສຸດທ້າຍແຫ່ງການເຮັດວຽກຮ່ວມກັນຂອງພວກເຮົາ ມືດມົນໄປເລີຍ ເຊມຸຍແອນ. - ເພິ່ນເວົ້າ. - ແລ້ວທຸກຢ່າງຫາກຈະປ່ຽນແປງໄປເອງດອກ. ເອີ...ບັດນີ້ຈົ່ງທຳ

ຄວາມເຂົ້າໃຈກັນສາເດີ. ໄລຍະນີ້ງມານີ້ເສັ້ນປະສາດຂອງຂ້ອຍມັນເຄັ່ງຕຶງໂພດ. ສາເຫດມັນກໍເນື່ອງມາຈາກວ່າຄຸນວຽກຫລາຍໂພດ. ມື້ອື່ນ ຂ້ອຍຢາກໄປທ່ຽວຫລິ້ນໄກໆຈັກບ່ອນ. ຂ້ອຍເບື່ອສະພາບກັກຂັງຕົວເອງນີ້ເຕັມທີແລ້ວ.

## IV

ແຕ່ເຊົ້າໆ ໂດບີໄດ້ຕຽມຕົວເພື່ອໄປທ່ຽວຫລິ້ນຍັງບໍ່ກ່ານພຸ້ນ.

- ເຊມຸຍແອນ, ຕ້ອງປ່ຽນບັນຍາກາດແດ່ຈັກໜ້ອຍແລ້ວລະ, - ເພິ່ນເວົ້າໃນຂະນະທີ່ເອົາຫໍ່ເຂົ້າງາຍທີ່ລຸງ ມິກລີ ຈັດແຈງໃຫ້ຮຽບຮ້ອຍແລ້ວນັ້ນຍັດເຂົ້າໄປໃນກົງ. ຫລັງຈາກນັ້ນ ເພິ່ນກໍຈັບເອົາກະຕິກໃສ່ນ້ຳແລະພາຍໂຄມໄຟທີ່ໃຊ້ສຳລັບເຂົ້າບໍ່ໃສ່ຄໍ.

- ທ່ານຈະເອົາໂຄມ "ເອີມີ" ນີ້ໄປນຳຫວະ? - ຂ້າພະເຈົ້າເວົ້າ ພ້ອມທັງຊີ້ມືໃສ່ໂຄມໄຟ.

- ແມ່ນແລ້ວ, ແລະຈະເອົາເຊືອກໄປນຳອີກຈັກຮ້ອຍຫລາ, - ໂດບີຕອບ. - ຢ່າສູ່ເຮັດຕາມິນມຶ້ງກົ້ງຂຶ້ນແບບນັ້ນແມ້. ຂ້ອຍບໍ່ມີເຈດຕະນາຫມົ້ນເຂົ້າໄປໃນໃຈກາງໂລກດອກ, ພຽງແຕ່ຢາກຮູ້ຈັກວ່າ ມີຫຍັງແດ່ທີ່ເກີດຂຶ້ນຢູ່ໃນບໍ່ເກົ່ານັ້ນ. ຂ້ອຍໄດ້ງິນເຂົາເວົ້າເຖິງມັນມາແຕ່ດົນແລ້ວ...

ຫົວໃຈຂອງຂ້າພະເຈົ້າປ່ຽມລົ້ນໄປດ້ວຍຄວາມປະທັບໃຈຕັ້ງແຕ່ຄັ້ງຍັງເປັນເດັກນ້ອຍຢູ່ພຸ້ນ.

- ໂອ້, ທ່ານ! ມີໂຄມໄຟ ຈັ່ງຊີ້ຊີຢ້ານຫຍັງອີກ...ຄາວຍັງນ້ອຍ ຂ້າພະເຈົ້າແລະ ແອດີກໍຍັງເຄີຍລົງໄປຫັ້ນຢ່າງບໍ່ມີພົນມີໄຟຫຍັງເລີຍ.

- ພໍແລ້ວ, ຢ່າມາຕົວະອີກ ເຊມຸຍແມນ, - ໂດບີ ປ່າຍມືປະຕິເສດ.

- ຂໍສາບານດ້ວຍກຽດ, ນ່າທ່ານ! - ຂ້າພະເຈົ້າຮ້ອງຂຶ້ນ. - ຂ້າພະເຈົ້າເຄີຍໄດ້ລົງໄປໃນບໍ່ຕ່າງໆທີ່ປາຕຣິກ ແລະບໍລິເວນໃກ້ກັບດອຍພິມມະຈັນນັ້ນແລ້ວ. ຍັງທີ່...

ເວົ້າຮອດນີ້ ຂ້າພະເຈົ້າຫຸບປາກທັນທີ.

- ຍັງທີ່ບໍ່ທັນໄດ້ລົງໄປໃນບໍ່ງວງຍາວ ແມ່ນບໍ່? - ໂດບີຫົວ. - ເອີ...ກໍຍັງດີ, ແລ້ວຊັ້ນເທື່ອນີ້ຂ້ອຍຊິລົງໄປໃນຫັ້ນ.

ຂ້າພະເຈົ້າຄຶດຄືນເຖິງເລື່ອງລາວຕ່າງໆກ່ຽວກັບບໍ່ງວງຍາວ. ເຂົາເຈົ້າເອີ້ນຊື່ບໍ່ກ່ານຮ້າງແຫ່ງນັ້ນວ່າຈັ່ງຊັ້ນແລ້ວ. ມີສັບພະປີແຕ່ເລື່ອງເລິກລັບ, ສະຍົດສະຫຍອງທີ່ບໍ່ເປັນສາເຫດ

ຫຍັງຕັ້ງຮ້ອຍແປດພັນຢ່າງ. ພວກແຂກຂາປະຈຳຂອງຮ້ານອາຫານ "ລາຊາເສືອ" ມັກຈະເກັບເອົາເລື່ອງເສກສັນປັ້ນແຕ່ງອັນຫນ້າສະຍົດສະຫຍອງຂົນລຸກຂົນພອງຕ່າງໆນາໆ ກ່ຽວກັບບໍ່ນີ້ມາເລົ່າສູ່ກັນຟັງ. ຄາວຍັງນ້ອຍ ຂ້າພະເຈົ້າບໍ່ເຄີຍໄປຮອດບ່ງວງຍາວຈັກເທື່ອດອກ, ແຕ່ກໍຮູ້ຈັກຫົນທາງໄປຍັງແຫ່ງນັ້ນດີ. ແອດີ ອິກພີ ໄປຮອດຫັ້ນແລ້ວ ແລະກໍມາຄຸຍໂມ້ປານກັບວ່າຫມໍໄດ້ລົງໄປຮອດພື້ນບໍ່ເອົາໂລດ. ຂະນະນັ້ນ ຂ້າພະເຈົ້າກໍເຄີຍອິດສາຕາຮ້ອນວິລະບູລຸດຄົນນີ້ຢູ່.

- ທ່ານ, ຫົນທາງໄປບ່ອນຫັ້ນມັນສັບສົນຫລາຍ, - ຂ້າພະເຈົ້າເວົ້າ. - ທຳອິດແມ່ນເລີ່ມຈາກດອຍດຳຕັດເນັ້ງລົງໄປຫາບໍ່ຮ້າງຕ່າງໆ, ຫລັງຈາກນັ້ນກໍລ້ຽວໄປກ້ຳຂວາ...

ໂດບີ ມີທ່າທີລັ່ງງເລງ:

- ເອີ...ບາງທີຂ້ອຍອາດຈະຫາທາງໄປບໍ່ພົບແລ້ວລະ.

- ທ່ານ, ຂໍທ່ານຈົ່ງກະລຸນາໃຫ້ຂ້າພະເຈົ້າເປັນຜູ້ພາທາງ, - ຂ້າພະເຈົ້າສະເຫນີ. - ຈະໄປຍາມບໍ່ຮ້າງເຫລົ່ານັ້ນຈະຕ້ອງໄດ້ລະມັດລະວັງທີ່ສຸດ. ໃນຈຳນວນບໍ່ເຫລົ່ານັ້ນມີບາງບໍ່ ບໍ່ມີພື້ນເລີຍ...

- ເຈົ້າເຮັດໃຫ້ຂ້ອຍຢ້ານແລ້ວ, - ໂດບີເວົ້າຢ່າງຄັ້ນຄິດ. - ເອົາລະ, ພວກເຮົາໄປນຳກັນກໍໄດ້. ເຈົ້າເຂົ້າໄປຫ້ອງກິນເຂົ້າເອົາກະຕິກນ້ຳໄປອີກອັນຫນຶ່ງ ແລ້ວພວກເຮົາພ້ອມກັນອອກເດີນທາງ. ຈົ່ງແມ່ນເຫມາະກັບໂອກາດ, ໄປທ່ຽວຫລິ້ນໃນບັນຍາກາດອັນແຈ່ມໃສເຊັ່ນນີ້ຈະມີຜົນປະໂຫຍດແກ່ພວກເຮົາ.

ຂ້າພະເຈົ້າພາຍກະຕິກນ້ຳບ່ຽງບ່າ, ເອົາເຂົ້າຈີ່ຍັດໃສ່ສອງສາມກ້ອນຍັດໃສ່ຖົງແລ້ວພາຍເອົາໂຄ້ງເຊືອກຂຶ້ນຫລັງ.

ຫລັງຈາກທີ່ລຸງ ມິກລີອອກໄປສົ່ງພ້ອມທັງກ່າວຄຳໃຫ້ພອນອັນດີງາມຫລາຍຢ່າງແລ້ວ, ພວກເຮົາກໍອອກເດີນທາງ ແລະປີນຜ່ານດອຍດຳໄປຢ່າງວ່ອງໄວແລະຄ່ອງແຄ້ວດີສົມຄວນ. ຫລັງຈາກນັ້ນພູມມີພາກກໍມີຄວາມສັບສົນຂຶ້ນກວ່າເກົ່າ. ໃນບັນດາຮ່ອມພູນັ້ນ, ມີປາກບໍ່ຕ່າງໆກ້ວາງເຫວີເລີກລົງໄປລຸ່ມພຸ້ນຢ່າງງຽບຂຶມ. ບັນດາກອງກ່ານຮ້າງທີ່ໂສກເສົ້າເກົ່າຫມອງກອງເກັນຢູ່. ເມື່ອກ່ອນນີ້ນານມາແລ້ວ ເຂົາເຈົ້າໄດ້ມາຂວັກໄຂ່ວໃຈຫາກ້ອນເສດກ່ານທີ່ສາ

ມາດດັ້ງໄດ້ຈາກແຫ່ງນີ້. ຝົນແລະຫິມະໄດ້ໄຫລເຊາະຝຸ່ນກ່ານອອກໄປ, ສ່ວນການເວລາແລະຄວາມຮ້ອນນັ້ນຊ້ຳໄດ້ແດກດັນຂອງສົບສິນປົນເລເຫລົ່ານີ້ໃຫ້ເກາະແຫນ້ນເຂົ້າກັນເປັນຊັ້ນໆ.

ພວກເຮົາໄດ້ອອກຫ່າງຈາກຄະລືຫາດຕັ້ງເປັນໄລຍະສອງໄມແລ້ວ, ແລະພູພຽງອັນເປົ່າປ່ຽວກໍໄດ້ເຜີຍພາບຢູ່ຕໍ່ຫນ້າຂອງພວກຂ້າພະເຈົ້າ ເມື່ອພວກຂ້າພະເຈົ້າອອກຫວິດຈາກຮ່ອມພູສຸດທ້າຍນັ້ນແລ້ວ.

ກ່ອນນີ້, ຂ້າພະເຈົ້າບໍ່ເຄີຍມາຮອດພູພຽງນີ້ຈັກເທື່ອ. ແຕ່ຄາວຍັງນ້ອຍ, ຮ່ອມດຳຄືສາຍແດນສຸດທ້າຍ, ບ່ອນສິ້ນສຸດການໄປທ່ຽວຂອງພວກເດັກນ້ອຍ. ຂະນະນີ້ພວກຂ້າພະເຈົ້າພວມກ້າວເຂົ້າສູ່ດິນແດນມະຫັດສະຈັນຊຶ່ງມັນໄດ້ດຶງດູດຈິດໃຈພວກເຮົາ ແຕ່ສະໄຫມຍັງເປັນເດັກນ້ອຍຍ້ອນຄວາມເລິກລັບຂອງມັນ.

ເພື່ອນຈົ່ງວາດພາບເບິ່ງພາບພື້ນຫນອງແຕ່ບູຮານປະກົມມະການແຫ່ງຫນຶ່ງ ເຊິ່ງນ້ຳແຫ້ງໄປແລ້ວແລະກຶກແຜ່ນດິນໄຫວພູໄຟແຕ່ສະໄຫມຊິມລົມປະກົມມະການພຸ້ນຍູ້ໃຫ້ສູງຂຶ້ນ ມາຈາກຫນ້າທະເລ, ແລ້ວເພື່ອນກໍຈະເຂົ້າໃຈເຖິງທັດສະນີຍະພາບທີ່ປະກົດຂຶ້ນມາຢູ່ຕໍ່ຫນ້າຂອງພວກເຮົາ ຂະນະນັ້ນວ່າມັນເປັນຈັ່ງໃດພາຍຫລັງທີ່ພວກເຮົາໄດ້ໃຊ້ເວລາຢ່າງເປັນຊົ່ວໂມງຈຶ່ງມາເຖິງບໍລິເວນໃກ້ຄຽງຂອງບໍ່ງວງຍາວເຊິ່ງຕັ້ງຢູ່ກາງພູພຽງແຫ່ງນີ້.

ກຳແພງຫີນປະກາລັງຫນາໆໄດ້ອ້ອມລ້ອມເອົາບໍລິເວນຂຸມດິນດາກ ອັນມະຫາສານນີ້ໄວ້. ບັນດາໂງ່ນຫີນປະກາລັງທີ່ມີຮູບຮ່າງແປກປະຫລາດມະຫັດສະຈັນທີ່ສຸດນັ້ນຕັ້ງເດັ່ນຢູ່ອ້ອມຂ້າງນັ້ນ. ມີບາງໂງ່ນຄືກັບດອກເຫັດຍັກທີ່ແປກປະຫລາດ, ມີບາງໂງ່ນຊ້ຳຄືກັບຕົວກະປອມຍັກທີ່ກາຍເປັນຫີນໃຫຍ່ສ່ຳເຮືອນສາມຊັ້ນຍືນຍຶດຕົວຂຶ້ນດ້ວຍຂາຫລັງ ແລະອ້າປາກທີ່ເຕັມແຕ່ແຂ້ວຂອງມັນອອກມາ. ຢູ່ທາງກາງນັ້ນແມ່ນຂຸມບໍ່ກ່ານທີ່ກືກປະຮ້າງໂກນເລິກດຳຈົ່ມກົ່ນລົງໄປ. ທັດສະນີຍະພາບທີ່ສະຫລັກຫັກພັງແລະໂສກເສົ້າຂອງບັນດາກິດຈະກຳກໍ່ສ້າງດ້ວຍດິນຈີ່ ພ້ອມດ້ວຍຫລັງຄາສະຫລັກຫັກຍຸບຂອງມັນນັ້ນກໍຄົງຮັກສາໄວ້ເຊິ່ງຮູບຊົງເກົ່າແກ່ໄວ້ເຊັ່ນເດີມ. ສ່ວນບັນດາທ່ອນເຫລັກຂີ້ຫມ້ຽງຂອງຂອບຄ້ຳມັນນັ້ນກໍຄືກັບໂຄງກະດູກຂອງສັດປະຫລາດ, ພວກມັນພົ້ນຂຶ້ນມາຈາກກອງຂີ້ຜົງທີ່ພຸພ່ອຍຂອງຫລັງຄາໄມ້. ທົ່ວທຸກແຫ່ງປົກຄຸມໄປດ້ວຍຫລືບຂີ້ຝຸ່ນອັນຫນ້າໂສກເສົ້າ.

ນັ້ນແລ້ວຄືບໍ່ງວງຍາວທີ່ລີ່ຊີ່.

- ຕ້ອງລະມັດລະວັງ, - ໂດບີເວົ້າຢ່າງເຄັ່ງຂຶມ.

ຂ້າພະເຈົ້າບໍ່ຢາກແນມເບິ່ງຮູບພາບອັນແສນໂສກເສົ້າຢູ່ອ້ອມຂ້າງນັ້ນອີກ. ພວກເຮົາໄປຍັງປາກບໍ່ງວງຍາວ. ໂດບີ ກົ້ມຫີນນ້ອຍລົງກ້ອນໜຶ່ງແລ້ວສະດັບຟັງ, ແຕ່ບໍ່ມີສຽງຫຍັງດັງຂຶ້ນມາຈາກພື້ນບໍ່ເລິກໆນັ້ນເລີຍ.

- ບໍ່ໂດນີ້ບໍ່ມີພື້ນ, - ຂ້າພະເຈົ້າພຶມພຳ.

- ເອີ...- ໂດບີຫົວ, - ກ້ານັ້ນແມ່ນຄືດັ່ງເຈົ້າເວົ້ານັ້ນ ກ້ອນຫີນທີ່ຂ້ອຍຫາກໍ່ກົ້ມລົງໄປນັ້ນຈະລອຍຜ່ານໃຈກາງພິພົບຂອງພວກເຮົາ, ແລ້ວຈະໄປຊອດບ່ອນໃດບ່ອນໜຶ່ງ, ສົມມຸດວ່າໄປຊອດອອກຢູ່ ຊີລີຈັ່ງຊັ້ນຫວະ? ເລື່ອງນີ້ເປັນໄປບໍ່ໄດ້ທັງນັ້ນ.

ເພິ່ນຜູກເຊືອກອ້ອມທ້ອງດ້ວຍຄວາມກ້າຫານແລ້ວຮັດໂຄມ "ເອີມີ" ໃສ່ເອິກແໜ້ນໆ.

- ທ່ານຊິລົງໄປພື້ນບໍ່ງວງແທ້ຫວະນີ? - ຂ້າພະເຈົ້າທ້ວງຂຶ້ນ, ໃນໃຈປ່ຽມລົ້ນໄປດ້ວຍຄວາມຢຳເກງ. ຂ້າພະເຈົ້າຊື່ນຊົມໃນນ້ຳໃຈກ້າຫານຂອງ ໂດບີ ເປັນຢ່າງຍິ່ງ.

ເພິ່ນເຂົ້າໃຈໃນຄຳຖາມທີ່ມ່ວນແມ້ງຂອງຂ້າພະເຈົ້າ.

- ສະເພາະເທື່ອນີ້ ຂ້ອຍອະນຸຍາດໃຫ້ເຈົ້າລະເມີດເງື່ອນໄຂຂອງສັນຍາ, - ເພິ່ນເວົ້າຢ່າງເຄັ່ງຂຶມ. - ຂ້ອຍບໍ່ມັກໃຫ້ເຈົ້າແນມເບິ່ງຂ້ອຍຄືແນມເບິ່ງຄົນປະຫລາດຜູ້ໜຶ່ງ. ຂ້ອຍມັກລະບຽບທີ່ເຄັ່ງຄັດ. ແມ່ນແລ້ວ ຂ້ອຍຈະລົງບໍ່ງວງຍາວ, ແຕ່ບໍ່ແມ່ນຍ້ອນເກມຫລິ້ນຂອງເດັກນ້ອຍ. ເຈົ້າຮູ້ຈັກບໍ່, ເຊມຸຍແອນ, ຂ້ອຍບໍ່ໄດ້ຮັ່ງເກີງຂັ້ນເຈົ້າຄຶດ. ຂ້ອຍມັກຄວາມສະດວກສະບາຍຢູ່ສະເໝີ, ແຕ່ກໍ່ຖືກນິໄສຟຸ່ມເຟືອຍ. ເງິນແຕ່ລະອັດທີ່ຂ້ອຍໃຊ້ຈ່າຍໄປລ້ວນແຕ່ໄດ້ມາຈາກການອອກແຮງງານອັນລຳບາກກາກກຳທັງນັ້ນ. ໃຜຜູ້ມີແຕ່ເຮັດວຽກແລະຫາເງິນເພື່ອການມີຊີວິດຢູ່ແລະມີແຕ່ຄຶດນຳກະເພາະຂອງຕົນ, ຄຶດເຖິງຄວາມສະດວກສະບາຍສ່ວນຕົວເທົ່ານັ້ນ ຜູ້ນັ້ນຄືຄົນຂີ້ສຸດ. ຈະຕ້ອງຄຶດເຖິງປະຊາຊົນເຊິ່ງພວກເຮົາເປັນພີ່ນ້ອງລູກຫລານຂອງເຂົາເຈົ້າ, ຄຶດເຖິງດິນດອນຕ່ອນຫຍ້າທີ່ຮັກແພງບ່ອນເຊິ່ງພວກເຮົາໄດ້ກືກຳເນີດເກີດມາແລະຈະຮັບເອົາຊາກສົບຂອງພວກເຮົາໄວ້ໃນໝາກຫົວໃຈຂອງມັນເມື່ອພວກເຮົາໄດ້ຢຸດຕິເສັ້ນທາງຊີວິດລົງໄປ. ເຊມຸຍແອນ, ຕ້ອງຄຶດເຖິງປະເທດຊາດ.

- ທ່ານ, ຂ້າພະເຈົ້າຍັງບໍ່ທັນເຂົ້າໃຈຄວາມຫມາຍຂອງທ່ານຄັກແນ່ເທື່ອໃດ, - ຂ້າພະເຈົ້າເວົ້າທັງເອົາໃຈໃສ່ຟັງ.

- ແລ້ວເຈົ້າຈະເຂົ້າໃຈໃນບໍ່ຊ້ານີ້ລະ, - ໂດບີ ກ່າວແລະຄວາມເວົ້າດັ່ງກ່າວໄດ້ປະທັບໃຈຂ້າພະເຈົ້າທີ່ສຸດ. - ເລື່ອງທີ່ເຈົ້າເລົ່າກ່ຽວກັບບັນດາບໍ່ກ່ານຮ້າງນີ້ພາໃຫ້ຂ້ອຍມີຄວາມກະຕຸ້ນໃຈຢ່າງເລິກເຊິ່ງ. ເຂົາເຈົ້າລະກິ້ມການຂຸດຄົ້ນກ່ານນີ້ ປະກົດວ່າຍ້ອນມັນບໍ່ໃຫ້ຜົນກຳໄລ. ແຕ່ຄົນບໍ່ເປັນເຊັ່ນນັ້ນເດລະ? ຖ້າຢູ່ນີ້ຍັງມີຊັບສິນບັດຢູ່ມາກມາຍກ່າຍກອງ, ຍັງກ່ານນັບເປັນລ້ານໆ ໂຕນເຊິ່ງປະເທດຊາດຂອງພວກເຮົາອາດຈະຂຸດຄົ້ນຂຶ້ນ ຢ່າງບໍ່ຕ້ອງເອົາມາຈາກທີ່ອື່ນທີ່ໄກເດລະ? ຖ້າບໍ່ຖືກປະຮ້າງໄປຍ້ອນບັນດາເຈົ້າຂອງບໍ່ໂລພາໃນບໍລິເວນນີ້ເຫັນວ່າມັນມີກຳໄລນ້ອຍເດລະ? ຖ້າເຂົາເຈົ້າຂີ້ຄ້ານເຮັດວຽກທຳງານ ເພື່ອຟື້ນຟູການຂຸດຄົ້ນຄືນໃຫມ່ເດລະ? - ໂດບີແນມອອກໄປໄກໆ. - ພວກເຮົາຄວນເອົາຄົນລັດເຊຍມາເປັນແວ່ນແຍງ, - ເພິ່ນເວົ້າຢ່າງເຄັ່ງຂຶມ. - ພວກເຮົາຍັງຮູ້ຈັກປະຊາຊາດຮັກຫອມແຮງງານນີ້ນ້ອຍເກີນໄປ. ກ່ອນຫນ້ານີ້ບໍ່ດົນເຂົາເຈົ້າໄດ້ເຕົ້າໂຮມມະຫາຄອບຄົວມິດຕະພາບ, ເອກະພາບຢູ່ອ້ອມຂ້າງຂອງຕົນມາເປັນປະເທດຊາດອັນຍິ່ງໃຫຍ່ປະເທດຫນຶ່ງ. ເຂົາເຈົ້າໄດ້ເລີ່ມຕົ້ນກໍ່ສ້າງເສດຖະກິດດ້ວຍລຳແຂນອັນເຂັ້ມແຂງຂອງຕົນ. ພາລະກິດຂຸດຄົ້ນບໍ່ແຮ່ຂອງເຂົາເຈົ້າແມ່ນລ້ຳເລີດທີ່ສຸດ! ພາລະກິດຟື້ນຟູບໍ່ແຮ່ນັບເປັນຮ້ອຍໆບໍ່ທີ່ອຸຮານເຊິ່ງມັນຖືກປ່ອຍປະໄປກໍຍ້ອນເຫດຜົນພຽງວ່າບໍ່ມີກຳໄລນັ້ນມັນຍິ່ງໃຫຍ່ທີ່ສຸດ! ແຕ່ເມື່ອປະຊາຊົນໄດ້ລົງມືເຮັດວຽກຕົວຈິງແລ້ວ ແລະຄວາມຈິງມັນກໍຍັງມີກຳໄລດີຢູ່ ເມື່ອເວົ້າເຖິງກ່ານແລ້ວ, ຄົນລັດເຊຍສາມາດນຳຫນ້າໄດ້...

- ພວກເຮົາພວມຂາດເຂີນກ່ານຊັ້ນຫວະ? - ຂ້າພະເຈົ້າຖາມ.

- ແລ້ວວັນນັ້ນຈະມາເຖິງ, ເຊມຸຍແອນເອີຍ, ພວກເຮົາຈະເຫັນວ່າກ່ານແຕ່ລະກ້ອນມັນມີຄ່າ, - ໂດບີ ຕອບ.

- ຄັນຊັ້ນທ່ານຕ້ອງການຫຍັງ?

- ກ່ອນອື່ນຫມົດ ຂ້ອຍຈະກວດກາເບິ່ງດ້ວຍຕົນເອງວ່າມີຫຍັງເກີດຂຶ້ນຢູ່ພົ້ນບໍ່ນັ້ນ ແດ່. ແລ້ວຈະເຊີນບັນດານັກວິຊາການມາ. ຂ້ອຍຈະຫວງໃຫ້ເຂົາເຈົ້າອະນຸຍາດໃຫ້ຂ້ອຍເຊົາບ່ອນຕ່າງໆເຫລົ່ານີ້ຈົນໄດ້. ແລະບາງທີບໍ່ແມ່ນວ່າວຽກງານນີ້ຈະບໍ່ມີຜົນກຳໄລ.

- ໂອ ທ່ານ ໂດບີ! - ຂ້າພະເຈົ້າແກວ່ງຫົວ, - ມັນເປັນກິດຈະການທີ່ໃຫຍ່ໂຕແທ້ໃດ...

- ຊັ້ນເຈົ້າຄຶດວ່າມັນແມ່ນເລື່ອງຫລິ້ນໆຫວະ? - ເພິ່ນຍິ້ມ. - ເອົາລະ... ຕ້ອງລົງໄປ ແລະກວດກາເບິ່ງກ່ອນ. ມື້ແລງພວກເຮົາຈະເລົ່າເລື່ອງດູດດື່ມຈິດໃຈຕ່າງໆເຫລົ່ານີ້ໃຫ້ມິກລີຂອງພວກເຮົາຟັງ. ເຈົ້າລອງຄຶດວາດພາບເບິ່ງວ່າລາວຈະໂອ່ງບໍ່ແມ່ນຂອງຄ່ອຍ! ເອົາ, ຈັບເຊືອກໃຫ້ແຫນ້ນໆ. ກ້າຂ້ອຍກຸກສອງບາດຢູ່ລຸ່ມພຸ້ນ ແລ້ວຊ່ວຍດຶງຂ້ອຍຂຶ້ນແດ່ເດີ.

ພວກເຮົາໄດ້ຜູກສົ້ນເຊືອກເບື້ອງນັ້ນໄວ້ກັບສົ້ນເສົາເຫລັກທີ່ພົ້ນຂຶ້ນມາຈາກຫນ້າດິນນັ້ນຮຽບຮ້ອຍແລ້ວ.

- ເຊມຸຍແອນ, ໄປກ່ອນເດີ - ໂດບີ ເວົ້າຢ່າງມ່ວນຊື່ນພ້ອມທັງປ່ອນຕົນລົງລຸ່ມ, - ເອີ... ເຈົ້າຮູ້ບໍ່, ຢູ່ນີ້ມັນມີພະນັກຂັ້ນໄດລົງໄປສະດວກທີ່ສຸດ.

ຫົວຂອງ ໂດບີ ຫາຍລັບໄປ. ຂ້າພະເຈົ້າປ່ອຍເຊືອກລົງໄປດ້ວຍຄວາມລະມັດລະວັງ. ໂດບີ ລົງເລິກຈົນສຸດຄວາມຍາວຂອງໂຄ້ງເຊືອກ. ຂະນະນີ້, ເຊືອກເຄັ່ງແນບຕິດກັບປາກບໍ່ຢູ່ຢ່າງງຽບໆ. ຂ້າພະເຈົ້າແນມສ່ອງລົງລຸ່ມເຫັນຈ້ຳນ້ອຍໆຮຸ່ງໆພວມເຄື່ອນໄຫວໄປມາຢູ່ໃນເງົາມືດດຳຈົ່ມກົ່ມນັ້ນ.

- ຈັ່ງໃດ! - ຂ້າພະເຈົ້າຮ້ອງຂຶ້ນດ້ວຍຄວາມກະຕຸ້ນໃຈ.

ເພື່ອເປັນການໃຫ້ຄຳຕອບຂ້າພະເຈົ້າ, ເຊືອກກຶກກະທິກບາດຫນຶ່ງ. "ໄດ້ງືນແລ້ວ", - ຂ້າພະເຈົ້າຄຶດ. ຫລັງຈາກນັ້ນ ເຊືອກບໍ່ເຫນັງບໍ່ຕີງຢູ່ດົນເຕີບ. ເລື່ອງນີ້ພາໃຫ້ຂ້າພະເຈົ້າວິຕົກກັງວົນຍິ່ງ. ບາງທີໃນບໍ່ກ່ານນີ້ອາດຈະມີອາຍທີ່ເປັນພິດ, ຄັນຊັ້ນ ໂດບີ ກໍອາດຈະຕົກຢູ່ໃນລະຫວ່າງອັນຕະລາຍຍ້ອນຂາດອາກາດ. ໃນທີ່ສຸດ, ຂ້າພະເຈົ້າກໍດີໃຈຫມົດແຮງ, ເຊືອກເຫນັງຕີງອີກ. ຂ້າພະເຈົ້າເລີ່ມດຶງເຊືອກຂຶ້ນ, ຮູ້ສຶກໄດ້ເຖິງນ້ຳຫນັກຂອງໂດບີ. ເມື່ອເພິ່ນປໍ່ລໍຫນ້າຂຶ້ນມາຈາກປາກບໍ່ ຂ້າພະເຈົ້າເຫັນຕົວເພິ່ນດຳກ່ວາຄົນຜິວດຳເສຍອີກ. ເພິ່ນຄືກຳມະກອນຜັດທໍ່ຄວັນໄຟຜູ້ໃດຜູ້ຫນຶ່ງຫລາຍກວ່າຄື ໂດບີ ອີກ.

- ຢ່າຊິຕົກສະເງີ້ແບບນັ້ນດີເວີຍ, - ເພິ່ນພຶມພຳ ແລະຂາກນ້ຳລາຍດຳປຶກກຸ່ມອອກມາ. - - ເຈົ້າດຶງໄວໂພດເຮັດໃຫ້ຂ້ອຍຕ້ອງລຳບາກທີ່ສຸດຈຶ່ງຂຶ້ນມາທັນ.

- ທ່ານ, ຂ້າພະເຈົ້າວິຕົກນຳທ່ານຫລາຍ.

ໂດບີ ບິນຂຶ້ນມາແລ້ວນັ່ງເອະລິງດິນ. ນ້ຳເຫື່ອດຳແລະເປື້ອນໄຫລຢູ່ສອງຟາກແກ້ມຂອງເພິ່ນຄືສາຍຫ້ວຍ. ເພິ່ນຫັນໃຈເອົາອາກາດບໍລິສຸດດ້ວຍຄວາມສວ່າງກາຍສະບາຍອາລົມ.

- ວິເສດ, ເຊມຸຍແອນເອີຍ, - ເພິ່ນຫົວ, ແຂ້ວຂາວແກກແຊກອອກມາ. ຢູ່ລຸ່ມພຸ່ມນີ້ກ້ຳຫີນ ນິມພາງາມຢ່າງບອກບໍ່ຖືກເລີຍ... ເອົາລະເພື່ອນ, ກິນງາຍກັນເທາະ...

ເພິ່ນໄຂຫໍ່ເຂົ້າ ແລ້ວຮ້ອງໂອຍວາຍຂຶ້ນ.

- ໂອ້... ຈັ່ງແມ່ນເປັນຕາຢາກຮ້າຍແທ້ເວີຍ!

- ມີເລື່ອງຫຍັງບໍ, ທ່ານ? - ຂ້າພະເຈົ້າຖາມ.

- ເອີ... ບໍ່ມີຫຍັງດອກ! ຂ້ອຍເຮັດກອກເຮ່ຍ. ເປັນຕາເສຍດາຍອີ່ຫລີ. ແຕ່ ມື້ອື່ນຂ້ອຍຊິໄປຊອກມັນຄືນມາ ຄືຊິພົບຢູ່ດອກ.

ເພິ່ນຫຍໍ້ເຂົ້າຈີ່ກັບຊີ້ນເອືອບຢູ່ດ້ວຍຄວາມຄຶນຄຶດ.

- ທ່ານ, ທ່ານກະລຸນາເລົ່າເລື່ອງກ້ຳຫີນນິມພານັ້ນໃຫ້ຟັງແດ່, - ຂ້າພະເຈົ້າສະເຫນີ.

- ຂ້ອຍບໍ່ຊ່າງຊິພັນລະນາໄດ້ດອກ ເຊມຸຍແອນ. ທຸກສິ່ງທຸກຢ່າງມັນເຫລືອມຍາບໆຢູ່ຄືກັບຫີນວິເສດນີ້, ແຕ່ຂ້ອຍເວົ້າຢອກຊື່ໆດອກ. ຄວາມຈິງແລ້ວ, ບາງທີຢູ່ຫັ້ນ ອາດຈະຍັງມີກ້ານຫລາຍສິມຄວນ.

ອາຫານຖືກກິນຈົນກ້ຽງ.

- ເຊມຸຍແອນ, ດຽວນີ້ກ້າແມ່ນໄດ້ສູບຢາຈັກປົກຄືຊິດີກເວີຍ, - ໂດບີ ເວົ້າແລ້ວຕື່ມດ້ວຍຄວາມຂຸ່ນເຄືອງ: - ບະ, ກອກນັ້ນ! ເຊມຸຍແອນ, ເຈົ້າປ່ອຍຂ້ອຍລົງອີກເທື່ອຫນຶ່ງເບິ່ງດູ!

ນ້ຳໃຈຫ້າວຫັນຕາມທຳມະຊາດຂອງໄວຫນຸ່ມໄດ້ບັງຄັບໃຫ້ຂ້າພະເຈົ້າຕ້ອງເອີ່ຍຂຶ້ນ:

- ຂໍທ່ານຈົ່ງອະນຸຍາດໃຫ້ຂ້າພະເຈົ້າລົງໄປສາ.

ແຕ່ ໂດບີ ຊ້ຳກັບຍ່າງໄປທີ່ປາກບໍ່ ແລ້ວຊີ້ມືລົງໄປ:

- ລົງໄປຫັ້ນຫວະ? ບໍ່ດອກເພື່ອນເອີຍ. ມັນຈະແຈ້ງແລ້ວວ່າ ມື້ນີ້ຂ້ອຍມີໂຊກຈະໄດ້ຊື່ນໃຈເຖິງສອງຄັ້ງລຽນຕິດ ເວົ້າແລ້ວກະດາຍ, ເຈົ້າຊິລົງໄປໃຫ້ກ້ານໂອບຄໍເຮັດຫຍັງບຸ?

ແຕ່ຂ້າພະເຈົ້າໄຫວ້ວອນຈົນໄດ້. ຈິດໃຈຂອງຂ້າພະເຈົ້າພິດພົ້ນຂຶ້ນມາດ້ວຍຄວາມຝັນແບບເດັກນ້ອຍກ່ຽວກັບຄວາມລັບຂອງບໍ່ຈອງຍາວ ແລະຂ້າພະເຈົ້າກໍອ້ອນວອນ ໂດບີຢ່າງຮ້ອນອົກຮ້ອນໃຈ ເຖິງຂັ້ນວ່າເກືອບຈະຕົກລົງໄປໃນເຫວນັ້ນ.

ໂດບີ ປ່າຍມືປະຕິເສດຢ່າງຂາດຂັ້ນ.

- ປ່ອຍຂ້ອຍລົງໄປ ແລະບໍ່ຕ້ອງຊູຊີອີກ.

ແຕ່ຂ້າພະເຈົ້າກໍຄຶງຈ່ອງດຶງ ໂດບີ ໄວ້ແລະອ້ອນວອນ, ພ້ອມນັ້ນກໍຍົກເຫດຍົກຜົນຂຶ້ນມາ ຮ້ອຍອັນພັນຢ່າງວ່າຂ້າພະເຈົ້າສົມຄວນຈະເປັນຜູ້ລົງໄປນຳເອົາກອກນັ້ນຂຶ້ນມາ. ໃນທີ່ສຸດ ໂດບີ ກໍຜ່ອນສຽງລົງແຕ່ເລັກນ້ອຍ.

- ເຈົ້າຢາກລົງໄປຊົມຫີນນົມຜານັ້ນຫວະ? ຢູ່ລຸ່ມຫັ້ນໃສມັນຊີມື. ຂ້ອຍເວົ້າຢອກຊື່ໆນ່າ. ແຕ່ເອົາລະຫາລະລົງໄປເພື່ອຫວນຄຶດເຖິງຄວາມຂີ້ດື້ໃນຍາມຍັງນ້ອຍໄວຂອງເຈົ້າສາ. ແຕ່ບັນຫາຂອງມັນມີຢູ່ວ່າ ຢ່າລົງໄປເລິກຈົນສຸດຊົ່ວເຊືອກເດີ.

ເພິ່ນເວົ້າດ້ວຍຄວາມຮັກແພງແລະແກ້ປູດເຊືອກອອກຈາກທ້ອງຂອງຕົນ.

- ຟັງນີ້, .ເຊມຸຍແອນ, ທຳອິດມີພະນັກຕິດຝາລົງໄປຄືກັນກັບຂັ້ນໄດນີ້ແຫລະ. ຈົ່ງຊູດຕົວລົງຕາມພະນັກນັ້ນຊ້າໆ ແລະລະມັດລະວັງ.

- ເຈົ້າ, ຂ້າພະເຈົ້າຮູ້ຈັກວິທີປີນຢູ່ໃນບໍ່ອື່ນໆແລ້ວ! - ຂ້າພະເຈົ້າຕອບດ້ວຍຄວາມຊື່ນໃຈ.

ໂດບີ ຫຍຸ່ມຄິ້ວດົກງາທັງຄູ່ເຂົ້າກັນ.

- ຢ່າຕັດຄວາມຂ້ອຍ. ຕັດຄວາມຄົນອາຍຸສູງແມ່ນນິດໄສບໍ່ດີອັນຫນຶ່ງ. ລົງເລິກປະມານຫ້າຫລືສິບຫລາກໍຈະພົບລານພັກບ່ອນຫນຶ່ງ, ຢູ່ເບື້ອງຊ້າຍຂອງມັນມີຂັ້ນໄດ. ແຕ່ຢ່າໄປຢຽບມັນ: ຂັ້ນໄດທຸກໆລູກມັນໂດກຫມົດແລ້ວ. ຂ້ອຍບອກບໍ່ໃຫ້ເຈົ້າລົງໄປກາຍນັ້ນອີກ ແຕ່ຕ້ອງຂຶ້ນມາໂລດ. ຖ້າບໍ່ເຫັນກອກຢູ່ຫັ້ນແລ້ວ ກໍຢ່າໄປຊອກມັນອີກ.

- ຄັນຊັ້ນກໍ້ເດລະ?

- ບໍ່ມີກໍ້ມີກົ້ມອີ່ສັງຫມົດ! ເມື່ອພວກນັກວິຊາການມານີ້ແລ້ວ ຢາກຈະຂຶ້ນໆລົງໆເທົ່າໃດກໍຕາມໃຈ. ດຽວນີ້ຈະຕ້ອງລະມັດລະວັງກ່ອນ.

ໃນຂະນະທີ່ສັ່ງແລ້ວສັ່ງອີກຢູ່ນັ້ນ, ໂດບີ ກໍເອົາເຊືອກກ່ຽວທ້ອງຂອງຂ້າພະເຈົ້າແລະຜູກຢູ່ທາງຫລັງໃຫ້.

- ຈໍ່ານີ້ຄືຊິແຫນັ້ນແລ້ວ, ເບິ່ງແລ້ວປານວ່າຂອດເຊືອກເດີນທະເລນີ້ແຫລະ - ຈັ່ງໃດກໍຄືຊິ

ບໍ່ຫລຸດດອກ. ຂ້ອຍຂໍຍໍ້າຄືນອີກ ໃຫ້ລົງຮອດແຕ່ລານພັກຜ່ອນນັ້ນແລ້ວໃຫ້ສັນຍານໂລດ-
-ຂ້ອຍຊິດຶງເຈົ້າຂຶ້ນ.

-ໂຄມ, ທ່ານ?

-ເອີ... ເອີ່ແມ່ນດີ.

ໂດບີ ຣັດໂຄມ "ເອີມີ" ໃສ່ເອິກຂອງຂ້າພະເຈົ້າ. ຂ້າພະເຈົ້າບີບລອງເບິ່ງກ່ານໂຄມຍັງດີຢູ່.

-ນີເຊມຸຍແອນ, ເອົາກະຕິກໃສ່ນໍ້າຂອງເຈົ້າໄວ້ນີ້ສາເປັນຫຍັງ, -ໂດບີ ເວົ້າໃນຂະນະທີ່ຂ້າພະເຈົ້າຫາກໍປ່ອນຕີນລົງໄປ.

-ທ່ານ, ມັນບໍ່ໄດ້ລົບກວນຫຍັງຂ້າພະເຈົ້າເລີຍ.

-ລົງສາ, ຂ້ອຍດຶງເຊືອກໃຫ້ແລ້ວນີ້, -ໂດບີເວົ້າພ້ອມທັງຕຽມປ່ອຍເຊືອກລົງຕາມຂ້າພະເຈົ້າ.

-ຂອບໃຈທ່ານ, -ເວົ້າແລ້ວ, ຂ້າພະເຈົ້າກໍໃຊ້ຕີນຄໍາຫາພະນັກທີ່ແມນອອກມາຈາກຜາບໍ່ແລະເລີ່ມຕົ້ນລົງໄປ.

-ເກັ່ງຫລາຍ, ເຊມຸຍແອນ, -ຂ້າພະເຈົ້າໄດ້ຍິນສຽງລະດົມຂອງ ໂດບີ ຢູ່ທາງເທິງ.-
-ເອົາໃຈໃສ່ເນມເບິ່ງພະນັກຢູ່ທາງລຸ່ມຫັ້ນເດີ.

ຂ້າພະເຈົ້າໄດ້ໂຄມ, ບ່ອງວບໍ່ມີຫຍັງເປັນຫນ້າຢ້ານກົວເລີຍ. ແສງສະຫວ່າງຂອງໂຄມ "ເອີມີ" ກໍພຽງພໍທີ່ຈະກໍານົດທິດທາງໄດ້. ໃນເວລາລົງໄປນັ້ນ ຂ້າພະເຈົ້າບໍ່ເຫັນມີຫຍັງຜິດປົກກະຕິເລີຍ. ຕາມນິໄສປະຈໍາຕົວຂ້າພະເຈົ້າໄດ້ນັບພະນັກລົງໄປນັ້ນ ເພື່ອຄວາມແນ່ນອນໃນເວລາຂຶ້ນມາ. ເບື້ອງລຸ່ມພຸ້ນພວກເຈຍມັນຮ້ອງຈີດໆຢູ່. ລົງໄປໄດ້ສິບຫົກພັກຕີນຂອງຂ້າພະເຈົ້າກໍຊູນກືກລານພັກອັນຫນຶ່ງກ້ວາງພໍຄວນ. ບັນດາກະດູກນົກ ທີ່ພວມຜຸດອກໄປນັ້ນກອງເກະກະຢູ່ແຄມລານພັກ. ປະກົດວ່າພວກນົກເຄົ້າແມວຈະມາເຮັດຮັງຢູ່ໃນສະຖານທີ່ເປົ່າປ່ຽວແຫ່ງນີ້. ຂ້າພະເຈົ້າເງີຍຫົວຂຶ້ນ. ເບື້ອງເທິງຟ້າຂຽວປ່ຽງຫນຶ່ງພວມຮຸ່ງສ່ວາງຢູ່ຄືກັບພວມເອີ້ນຫາ, ສ່ວນເບື້ອງລຸ່ມຂອງລານພັກແມ່ນເຫວເລິກດໍາຄືມມຶມ. ຢູ່ຂ້າງຜານັ້ນ, ຂ້າພະເຈົ້າເຫັນຮອຍເກີບດຸມຂອງ ໂດບີແລະ ກອກຂອງເພິ່ນ. ຂ້າພະເຈົ້າເກັບຂຶ້ນມາແລ້ວຍັດເຂົ້າ

ກົງ. ເປັນທີ່ເຊື່ອແນ່ວ່າ ໂດບີ ຕ້ອງລົງໄປເລິກກວ່ານີ້. ຂ້າພະເຈົ້າບໍ່ຢາກສົ່ງສັນຍານກັບຄືນເມື່ອຈັກໜ້ອຍເລີຍ.

ບັນດາລູກຂັ້ນໄດໄມ້ທີ່ກ່າຍຂວາງນັ້ນໄດ້ໂດກໄປເຄິ່ງໜຶ່ງແລ້ວຈຶ່ງໄວ້ໃຈບໍ່ໄດ້. ຂ້າພະເຈົ້າເລືອກຫາຕຸ່ມຫີນທີ່ແໜ້ນແກ່ນ, ຄ້ວາສອງມືເກາະກຳເອົາມັນໄວ້ແໜ້ນໆ, ແລ້ວຊູດຕົວອອກຈາກລານພັກ ແລະໃຊ້ຕີນງົມຫາບ່ອນຈັ້ງ. ການຊູດຕົວລົງໄປຈະຫຍຸ້ງຍາກທີ່ສຸດ. ຂຸມລ້າງບໍ່ເປັນພົ້ງອອກໄປ ແລະຂ້າພະເຈົ້າກໍງົມໆທາວໆໄປຕາມບ່ອນໜຶ່ງໃນຝາຂຸມບໍ່ທີ່ເບິ່ງເລິກລົງໄປນັ້ນ, ໃຊ້ສອງຕີນແລະສອງມືເກາະກ້ອນຫີນທີ່ແນບອອກມາໄວ້ແໜ້ນໆ. ຂ້າພະເຈົ້າລືມໄປທຸກສິ່ງທຸກຢ່າງ, ຍິ່ງໄປກວ່ານັ້ນຍັງລືມຮອດຄວາມຢ້ານກົວອີກ. ຄວາມກະຕຸ້ນໃຈຢ່າງໄຮ້ດງສາກົມກ້ວມໄປທົ່ວທັງວິນຍານຂອງຂ້າພະເຈົ້າ. "ເປັນອັນວ່າເຮົາພວມຢູ່ໃນບໍ່ງວງຍາວນີ້ເອງ, - ຂ້າພະເຈົ້າຄຶດ. - ດຽວນີ້ ແອເດີ ຢ່າຫວັງວ່າຊິມາອວດ. ນີ້ມັນບໍ່ແມ່ນຂຸມບໍ່ຂ້າງປ່າປາຕຣິກນັ້ນເດີ". ຂຸມບໍ່ໂຕນັ້ນບໍ່ເລິກ, ພວກເຮົາເຄີຍລົງໄປຈັບເອົາເຈຍຢູ່ໃນຫັ້ນມາລໍ້ພວກຜູ້ສາວ.

ຂ້າພະເຈົ້າພວມຈະໃຫ້ສັນຍານສົ່ງຄວາມທັກທາຍໄປຍັງ ໂດບີ ແລະຄ້ວາຫາເຊືອກ. ເວົ້າໃຫ້ຖືກແທ້ ແມ່ນຂ້າພະເຈົ້າຢາກຈະຄ້ວາເອົາສາຍເຊືອກແລະຄຶດວ່າຄ້ວາເອົາມັນມາໄດ້ແລ້ວ. ແຕ່ຂ້າພະເຈົ້າກໍໄດ້ແຕ່ອ້າປາກອອກມາດ້ວຍຄວາມແປກໃຈ, ເພາະຄວາມຈິງແລ້ວເຊືອກນັ້ນໄດ້ຫລອຍລອຍຂຶ້ນໄປຢ່າງມີດາງບຄືກັບງູ ເດີຢືເອີສາແລ້ວ. ຝຸ່ນກຸ່ານແລະດິນຫີນພິພາກມັນຫລົ່ນລົງໃສ່ໝວກແງັບຂອງຂ້າພະເຈົ້າຕະພຶດ. ສາຍເຊືອກຫາຍວັບໄປ. ຂ້າພະເຈົ້າຢາກຈະຕີບໜ້າຜາກທີ່ໂງ່ງ່າວຂອງຕົນນັ້ນ, ແຕ່ມືທັງສອງຍັງຄາຢູ່: ຮ່າງກາຍຂອງຂ້າພະເຈົ້າແຂວນໂຕ້ນເຕັ້ນຢູ່ກັບສອງລຳແຂນນັ້ນເອງ.

ທັນໃດນັ້ນ ຫົວຂອງຂ້າພະເຈົ້າກໍເບົາຍ່ອງໄປຄ້າຍກັບເມົາກາເຟນີ້ແຫລະ. ຄວາມຄຶດອັນໜຶ່ງ ແລ່ນມາຕຳໃສ່ຂ້າພະເຈົ້າຄືນົກແອ່ນໂມ້ ບິນວູດມາໃສ່: "ຈັ່ງຊີ້ຫວະຂອດເຊືອກເດີນທະເລ!"

## V

ຂ້າພະເຈົ້າໃຊ້ຄາງກະໄດກົດກະດູມໄຟຂອງໂຄມ "ເອີມີ" ແລ້ວໂຄມໄຟກໍມອດບັບລົງໄປຕາມຄຳສັ່ງຢ່າງຄຳຮູ້. ຫລັງຈາກທີ່ຢືນຢຽດຄີງຊີ່ຄົງນັ້ງຢູ່ແລ້ວ, ຂ້າພະເຈົ້າກໍທັນໄດ້ແນບຕົງເຂົ້າຕິດກັບແຄມບໍ່ ເມື່ອຫີນໃຫຍ່ກ້ອນຫນຶ່ງຕົກວູດສືວຂ້າງຂ້າພະເຈົ້າລົງໄປດ້ວຍຄວາມໄວຂະຫນາດຍັກ. ໃນຄວາມມືດແລະປ່ງວພອຍປານນັ້ນຂ້າພະເຈົ້າກໍຍັງວາດພາບເຫັນມັນຕົກລົງໄປຢ່າງປ່ວງບ້າ. ມັນຊັດຕົວລົງຫວູດໆ, ພົ້ງຈາກແຄມຂຸມເບື້ອງນີ້ໄປກະທົບໃສ່ແຄມຂຸມເບື້ອງນັ້ນ. ຕິດຕາມມັນລົງມາແມ່ນໂງ່ນຫີນທີ່ສອງທີ່ໂຫຍັນຕົວລົງໃສ່ລານພັກບ່ອນຊຶ່ງມີໂຫງ່ນຫີນແມນອອກ ແລ້ວມັນກໍແຕກຊະໄປ. ເສດແຕກຂອງມັນພົ້ງອອກມາຕຳເອົາແກ້ມແລະມືຂອງຂ້າພະເຈົ້າບາດໄປຫລາຍບ່ອນ.

ຂ້າພະເຈົ້າບໍ່ມັກການກົ້ມໂບມຫລົ້ນແບບນີ້ເລີຍ ກ້າຢູ່ຂ້າງນັ້ນມີຊ້ງເຂົາຈັກບ່ອນແທ້ກໍຍັງວ່າພໍຈະຫລົບຕົວໄດ້ແດ່. ຂ້າພະເຈົ້າເອົາມືເບື້ອງຫນຶ່ງຈ່ອງຫີນໄວ້, ສ່ວນມືອີກເບື້ອງນັ້ນຄວັກຄ້ວາໄປຕາມຜາແຄມບໍ່. ຕີນເບື້ອງຂວາຂອງຂາພະເຈົ້າຄຳໄປພໍ້ບ່ອນຫນຶ່ງທີ່ແມນອອກມາ, ຂ້າພະເຈົ້າຈັ້ງຕີນໃສ່ບ່ອນນັ້ນແລະກັ້ນໃຈຢູ່. ຫີນພັດຕົກໄລ່ລງກັນລົງມາທືດໆອີກຊິດຂ້າງຊິດແອວຂ້າພະເຈົ້າໄປ. ເກີງວ່າຈະເປັນພຽງຫມາກຫີນນ້ອຍກ້ອນຫນຶ່ງກໍຕາມ ເມື່ອມັນໄດ້ຕົກລົງມາແຕ່ເທີງໆແບບນີ້ແລ້ວກໍຍ່ອມມີຄວາມໄວພໍປານລູກປືນນັດຫນຶ່ງ. ຂ້າພະເຈົ້າແບຄີງເນີໃສ່ກັບແຄມບໍ່ນັ້ນແຈບໆແລ້ວກໍຄືດຫາວິທີເອົາຕົວລອດຢູ່ກ້ອງລານພັກນັ້ນ. ທັນໃດນັ້ນ ຕີນຂອງຂ້າພະເຈົ້າກໍພະລາດ, ຂ້າພະເຈົ້າຂິດຕົວເຂົ້າ ແລະກົດຄາງກະໄດເຂົ້າໃສ່ປຸ່ມສຳຮອງຂອງໂຄມ "ເອີມີ". ຢູ່ໃກ້ໆຕີນຂ້າພະເຈົ້າມີປ່ອງນ້ອຍທີ່ຕິດຈອດໃສ່ກັບອຸໂມງແຄບໆເສັ້ນຫນຶ່ງ. ຂ້າພະເຈົ້າຫມົ້ນເຂົ້າໄປດ້ວຍຄວາມຍາກຊາ, ເອົາຕີນທັງສອງເບື້ອງເດ່ອອກໄປກ່ອນ. ຫລັງຈາກນັ້ນ ຂ້າພະເຈົ້າກໍພັກຄີງຄືນ, ມອດໂຄມ "ເອີມີ" ແລ້ວງົມມືດໄປ.

ທັນໃດນັ້ນກໍປະກົດມີແຜ່ນດິນໄຫວຂຶ້ນຢູ່ທາງຫລັງຂອງຂ້າພະເຈົ້າ, ມັນດັງກ້ອງຂຶ້ນຢ່າງປ່ວງບ້າ. ແລ້ວກໍກັບເຂົ້າສູ່ຄວາມມິດງຽບອັນເລິກລັບອຳມະຕະຂອງໃຕ້ພື້ນປະກະພີກັບຂຸມຝັງສົບທີ່ກືກກົມໄປແລ້ວນີ້. ມີເລື່ອງຫຍັງເກີດຂຶ້ນບໍ? ໂດບີ ຮັດຂອດຫລີມບໍ? ຫລືລາວ...ຕັ້ງແກ້ງ?

ແຕ່ຂ້າພະເຈົ້າ ບໍ່ມີເວລາຈະມາສຳຫລວດກວດກາເບິ່ງບັນດາສາຍເຫດການກະທຳຕ່າງໆ ຂອງໂດບີຢູ່ອີກແລ້ວ.

ຂ້າພະເຈົ້າຫວນກັບຄືນມາທາງເກົ່າລອງເບິ່ງ, ແຕ່ຄວາມຄາດຄະເນໃນແງ່ຮ້າຍຂອງຂ້າພະເຈົ້າໄດ້ກາຍມາເປັນຄວາມຈິງ. ຫີນທາງເຂົ້າບໍ່ຖືກກົມເສຍແລ້ວ. ຍັງແຕ່ວິທີດຽວຄືເບີດໄປທາງໜ້າຕາມເສັ້ນທາງໃນບໍ່ທີ່ຢູ່ຂ້າງນັ້ນເທົ່ານັ້ນ. ກ້າວ່າສາມາດຊອກຫາເສັ້ນທາງທີ່ມີລົມລ່ວງແລ້ວ ກໍນັບແມ່ນວິເສດທີ່ສຸດ. ເຊື່ອວ່າມັນຊ່ວຍໃຫ້ຂ້າພະເຈົ້າຂຶ້ນເມືອເທິງໜ້າດິນໄດ້. ກ້າແຫ່ງນີ້ແມ່ນບໍ່ເກົ່າຢູ່ທີ່ ປາຕິກ ແລ້ວຂ້າພະເຈົ້າກໍພໍທີ່ຈະຕວງການຈັດວາງຂອງມັນອອກຢູ່. ແຕ່ບໍ່ງວງຍາວຊ້ຳເປັນບໍ່ທີ່ໃຫຍ່ກວ່າເພິ່ນໝົດໃນບັນດາບໍ່ຮ້າງທັງຫລາຍເຊິ່ງຂ້າພະເຈົ້າບໍ່ມີຄວາມຮູ້ຫຍັງກ່ຽວກັບມັນເລີຍ. ກ້າຢູ່ບ່ອນນີ້ບໍ່ມີກະແສອາກາດລ່ວງເຂົ້າມາແລ້ວ ກໍແມ່ນວ່າ ຂ້າພະເຈົ້າຕ້ອງໃຈຂາດຕາຍຍ້ອນຫັນໃຈບໍ່ໄດ້ຄືກັບໜູທີ່ຖືກຂັງຢູ່ໃນກັບຊຶ່ງອັດໄວ້ແຈບໆນີ້ແຫລະ.

ຂະນະທີ່ນອນຢູ່ເທິງຫີນທາງໃຕ້ດິນແຄບໆນັ້ນ, ຂ້າພະເຈົ້າໄດ້ຄືດວາງແຜນເອົາຕົວລອດ. ເພິ່ນເຄີຍຄິດໄລ່ໄວ້ວ່າໂຄມເຂົ້າບໍ່ "ເອີມີ" ທີ່ໄຕ້ດ້ວຍກ່ານໄຟສາຍລຸ່ນ ອີກ ຊ ນີ້ສາມາດໃຊ້ວຽກໄດ້ພາຍໃນເຈັດຊົ່ວໂມງຕໍ່ເນື່ອງກັນ. ໂຄມທີ່ຖືກກົມພ້ອມກັບຂ້າພະເຈົ້າໜ່ວຍນີ້ ຖືກນຳໃຊ້ມາແລ້ວເກືອບຊົ່ວໂມງໜຶ່ງ. ດັ່ງນັ້ນ ຂ້າພະເຈົ້າຍັງສາມາດໃຊ້ມັນໄດ້ອີກພຽງຫົກຊົ່ວໂມງເທົ່ານັ້ນ, ກ້າວ່າ ໂດບີຫາກ ບໍ່ໄດ້ເຮັດໃຫ້ກ່ານຂອງມັນເສຍຫາຍໄປກ່ອນໃນລະຫວ່າງທີ່ລາວລົງບໍ່ງວງຍາວນັ້ນ. ຕ້ອງໄດ້ຄິດໄລ່ທຸກສິ່ງທຸກຢ່າງໄວ້. ແຕ່ຫລັງຈາກຫົກຊົ່ວໂມງໄປແລ້ວຈະເຮັດຈັ່ງໃດ ?

"ຄວາມມືດອຳມະຕະ, - ຂ້າພະເຈົ້າຕອບ. ແຕ່ ເຊມຸຍແອນບິນເອີຍ ຈົ່ງທຸ່ນທ່ຽງ. ໃນທີ່ສຸດເຈົ້າກໍໄດ້ບົດຮຽນອັນລ້ຳຄ່າ, ໂງ່ຈ້າມາສ່ຳນີ້ກໍພໍແລ້ວ".

ພາບແຫ່ງໄພອັນຕະລາຍທຸກຢ່າງທີ່ຂ້າພະເຈົ້າປະສົບພົບພໍ້ ນັບແຕ່ເວລາທີ່ກັບຈາກແອຊູໂອເຮີມາສູ່ຄະລືຫາດຂອງ ໂດບີ ໄດ້ປະກົດຕົວຂຶ້ນມາຢູ່ຕໍ່ໜ້າຂອງຂ້າພະເຈົ້າຢ່າງແຈ່ມແຈ້ງທີ່ສຸດ.

ແຕ່ຂະນະນີ້ ເວລາມັນມີຄ່າທີ່ສຸດ ຂ້າພະເຈົ້າໄດ້ກວດກາເບິ່ງຊັບສິນບັດຂອງຕົນ. ຢູ່

ໃນກົງຍັງມີຢາສູບຊອງໜຶ່ງລວມມີຫ້າກອກ, ລູກກັບຂີດສອງສາມດອກ, ແຜນົນພີນໜຶ່ງ, ເຂົ້າຈີ່ຍັດໃສ້ພ້ອມດ້ວຍເນີຍແຂງທີ່ເຫລືອກິນນັ້ນ. ຂະນະນີ້ສິ່ງທັງໝົດເຫລົ່ານັ້ນລ້ວນແຕ່ໄຮ້ປະໂຫຍດ, ແລະຂ້າພະເຈົ້າກໍຕ້ອງການພຽງແຕ່ມີດງັບດວງໜຶ່ງ. ຖ້າຂ້າພະເຈົ້າຫາກຶມີດຕັດເລັບມືໄປນຳຈັກອັນແລ້ວກໍພໍທີ່ຈະຖືວ່າມັນເປັນເຄື່ອງມືຢ່າງໜຶ່ງໄດ້. ໝວກແຈັບນັ້ນກໍຖືກກ້ອນຫີນເຮັດໃຫ້ຕົກໄປເສຍແລ້ວ, ແລະ ຂ້າພະເຈົ້າກໍບໍ່ເສຍດາຍມັນເລີຍ. ມີແຕ່ໂຄມ "ເອີມີ" ແລະກະຕິກໃສ່ນ້ຳນັ້ນເທົ່ານັ້ນທີ່ເປັນວັດຖຸອັນລ້ຳຄ່າ. ຂ້າພະເຈົ້າດື່ມນ້ຳອີກໜຶ່ງແລ້ວຄານໄປ.

ຖ້າເສັ້ນທາງໃຕ້ດິນສາຍນີ້ແມ່ນເສັ້ນທາງທີ່ຕິດຈອດກັນລະຫວ່າງສອງອຸໂມງເຂົ້າ - ອອກ, ຂ້າພະເຈົ້າກໍອາດຈະລອງລອດຜ່ານອຸໂມງເສັ້ນທີ່ສອງທີ່ຢູ່ຂ້າງນັ້ນເບິ່ງ. ແຕ່ບາດຫາ່ອຸໂມງນັ້ນກໍຖືກກຶມເຊັ່ນດຽວກັນແລ້ວເດລະ ?

ຂ້າພະເຈົ້າຄານໄປແລະເຕືອນສະຕິຕົນເອງຢູ່ສະເໝີວ່າ ເຖິງຈັ່ງໃດກໍຕ້ອງປະຫຍັດແສງສະຫວ່າງແລະນ້ຳ. ຂ້າພະເຈົ້າອາໃສແສງໂຄມ "ເອີມີ" ເພື່ອແນມເບິ່ງທາງໜ້າ, ຈື່ທາງໄວ້ແລ້ວມອດມັນ. ຫລັງຈາກນັ້ນ ຂ້າພະເຈົ້າກໍຄານຄວາຍໃຊ້ມືງົມໆທາວໆໄປຕາມດິນ. ຖ້າມີອັນຊູນຫົວກໍໄດ້ໂຄມຂຶ້ນມາແນມເບິ່ງ. ຮ່ອມທາງຕາມລະຫວ່າງກາງຂອງບັນດາສາຍຈ່ານກ່ານນັ້ນຄອນໆກໍກ້ວາງ, ຄອນໆກໍແຄບ. ສິ່ງທີ່ໜ້າຢ້ານທີ່ສຸດນັ້ນແມ່ນມີດິນເຈື່ອນຫລືຮ່ອມຕັນ. ແຕ່ຂ້າພະເຈົ້າບໍ່ໄດ້ມີຄວາມຮູ້ສຶກຂາດອາກາດ. ຄັນຊັ້ນກໍໝາຍຄວາມວ່າອາກາດຍັງລ່ວງເຂົ້າມາໄດ້ຢູ່. ການກ້າວໄປເບື້ອງໜ້າຂອງຂ້າພະເຈົ້ານັ້ນ ປານກັບວ່າມຸດລົງໄປໃນອ່າງອາບນ້ຳມຶກເອົາໂລດ. ຂ້າພະເຈົ້າຄານໄປຄືກັບໂຕກະປອມ ແຕ່ເບິ່ງປະກົມພຸ້ນແຫລະ. ຈິດໃຈຂອງຂ້າພະເຈົ້າລະເມີໄຝ່ຝັນຢູ່ກັບຄວາມຫວັງພຽງຢ່າງດຽວນັ້ນຄືການຄົ້ນພົບແສງສະຫວ່າງທີ່ໃຫ້ຄວາມເປັນອິດສະຫລະເສລີ.

ທັນໃດນັ້ນ ແຂນທີ່ຂ້າພະເຈົ້າງົມໆທາວໆໄປນັ້ນກໍພົບກັບຄວາມຫວ່າງເປົ່າ. ຈາກແສງສະຫວ່າງຂອງໂຄມ "ເອີມີ" ຂ້າພະເຈົ້າເຫັນຕົນເອງພວມງອຍຢູ່ເທິງປາກເຫວເລິກ. ເບື້ອງເທິງຫົວແມ່ນໂກນບັກໃຫຍ່ເປັນຜົ້ງດຳປື້ງ. ຢູ່ຕາມແຄມຂຸມບໍ່ນັ້ນເຫັນມີຈ່ານກ່ານແຍກກັນເປັນຫລືບໜາງໆຫລືບໃຜຫລືບລາວເປັນສາຍຢູ່.

ຍິດນ້ຳນ້ອຍຍາດປັບໆລົງມາຕາມເສົາຄ້ຳອຸໂມງທີ່ພຸໂດກໄປແລ້ວ. ອາກາດເຢັນແລະຊຸ່ມພຸ່ງຂຶ້ນມາແຕ່ເບື້ອງລຸ່ມ. ຈະໄປທາງໃດບາດນີ້? ບໍ່ຈຳນວນຫນຶ່ງທີ່ ແອຊູໂອເຣີ ເຄີຍມີທາງອອກຢູ່ຕີນພູຕ່າງໆພຸ້ນ ບາງທີ, ແລະດ້ວຍເຫດນີ້ເອງ ຂ້າພະເຈົ້າຈຶ່ງໄດ້ຕົກລົງຊຸດຕົວລົງໄປເບື້ອງລຸ່ມ.

- ບະ, ປິນເອີຍ, - ຂ້າພະເຈົ້າຫລຸດປາກເປັນສຽງອອກມາ, ສຽງຂອງຂ້າພະເຈົ້າດັງກ້ອງກັງວານຢູ່ໃນຮູກ້ຳໃຕ້ດິນນັ້ນ, - ເປັນຫລືຕາຍກໍແມ່ນຢູ່ບ່ອນນີ້ແຫລະ.

ນ້ຳເປື້ອນໄຫລຈ້ອກໆຢູ່ຕາມພື້ນດິນແຫງ. ກະດູກມ້າສອງສາມຊາກຖືກລ້າງຫລ້ອນໄປດ້ວຍນ້ຳຫ້ວຍໃຕ້ດິນສາຍນີ້. ຂ້າພະເຈົ້າຊຸດຕົວລົງໄປທາງລຸ່ມຢ່າງລຳຄານແລະງົມມືດໄປຕາມສາຍນ້ຳດັ່ງກ່າວ. ຫ້ວຍໄຫລອ້ອມໄປຕາມບໍ່, ຂ້າພະເຈົ້າເອງກໍບໍ່ຮູ້ວ່າຕົນເອງຕ້ອງງົມໆຫາວໆຢູ່ໃນຄວາມມືດໃຕ້ດິນນັ້ນດົນນານເທົ່າໃດ, ຄອນໆຂ້າພະເຈົ້າກໍປ່ອນມືລົງຕາມສາຍຫ້ວຍເພື່ອຟັງເບິ່ງວ່າມັນໄຫລໄປທິດໃດ ແລ້ວກໍໄປຕາມທິດນັ້ນ.

ຍ້ອນອິດເມື່ອຍເຫລືອທີ່ສຸດ, ຂ້າພະເຈົ້າຈຶ່ງບໍ່ໄດ້ຮູ້ສຶກສົດຊື່ນຂຶ້ນມາເລີຍ ເມື່ອສາຍລົມອັນເຢັນຊື່ນພັດແຕ່ທາງຂ້າງມາຖືກຕົວຂ້າພະເຈົ້າ. ກະແສອາກາດອັນບໍລິສຸດພາໃຫ້ຂ້າພະເຈົ້າມີຄວາມອຸ່ນໃຈ. ເອິງຫລັງເຂົ້າໃສ່ຝາຕະຝັ່ງອຸໂມງລຽບຕາມຈ່ານກ່ານເກົ່ານັ້ນ, ຂ້າພະເຈົ້າເລີຍຫລັບເຊືອບໄປ. ແຕ່ເມື່ອຕື່ນຂຶ້ນມາ ຂ້າພະເຈົ້າກໍຊວາດຮູ້ໂລດວ່າຕົນພວມຢູ່ໃສ ແລະຂ້າພະເຈົ້າກໍຄານໄປທິດກົງກັນຂ້າມກັບສາຍລົມນັ້ນດ້ວຍຄວາມຫມັ້ນໃຈ.

ມວນຫມູ່ຍອດແປກທີ່ເອ່ນອຽງໄປມາແຫ່ງປ່າ ປາດຣິກໄດ້ຕ້ອນຮັບຂ້າພະເຈົ້າເຂົ້າສູ່ອ້ອມແຂນອັນຂຽວຊື່ນຂອງມັນຢ່າງຍິ້ມແຍ້ມແຈ່ມໃສ. ດວງຕາເວັນທີ່ພວມລັບຫລ່ອນນັ້ນໄດ້ສາຍແສງເປັນຈ້ຳແດງຮຸ່ງສວຍງາມເຂົ້າໃສ່ມວນຕົ້ນໄມ້ແກ່ສີຕັບຫມູ. ບັນຍາກາດຫອມກຸບກຸ້ມໄປດ້ວຍກິ່ນຢາງໄມ້, ມວນຫມູ່ສາລິກາທີ່ຈັບລີ້ຢູ່ຕາມພຸ່ມໄມ້ໃບຫຍ້າຕ່າງກໍສົ່ງສຽງຮ້ອງອ້ອຍອິ່ນອອນຊອນ. ຫມູ່ຕັກກະແຕນເຕັ້ນຜ້ອກໆແຜ້ກໆຢູ່. ຊຸມພຶກສາຊາດອ່ຽງຕິງຕົວຊິຊ່ວາ. ໃບແຫລມໆຫລົ່ນຈາກຕົ້ນແປກທີ່ຂຽວຊື່ນຕົກລົງມາໃສ່ທົ່ວທັງຕົວຂອງຂ້າພະເຈົ້າ. ມີໃຜຜູ້ຫນຶ່ງຂີ່ລົດຈັກແລ່ນພຸ່ງໄປຕາມທາງໃນປ່າ. ທີ່ນີ້ ງາມເດັ່ນສະດຸດໃຈແລະກິ່ນຢາງໄມ້ກໍຫອມຫວນຊວນຊື່ນຢ່າງຍິ່ງ! ນອນຢູ່ເທິງເດີ່ນຫຍ້າ ຊຶ່ງພຸ່ມອັນຮົກເຮື້ອຂອງມັນໄດ້ປົກຄຸມ

ເອົາຫີນທາງທີ່ອອກມາຈາກບໍ່ຮາງ ລຳຊຸ່ຍຊຸ່ມ - ບ່ອນເຊິ່ງພວກເດັກນ້ອຍ ແອຊູໂອເຣີຜູ້ໃດກໍ ຍ່ອມຮູ້ຈັກມັນດີນັ້ນ, ຂ້າພະເຈົ້າຫັນໃຈສູບເອົາອາກາດທີ່ເຕັມໄປດ້ວຍຄວາມມີຊີວິດຊີວາເຂົ້າ ສູ່ຊວງເອິກຈົນເອິກເປັ່ງ. ແຫ່ງນີ້ ຫົວພາຍຸແຫ່ງລະດູໃບໄມ້ຫລົ່ນມັກສົ່ງສຽງວີ່ວອນຂຶ້ນມາສະ ເຫມີ, ສ່ວນສາຍຫ້ວຍນ້ອຍລອດພົ້ນນັ້ນໄຫລໂຮ່ງທັ້ງຕຶ້ງຂຶ້ນເທິງ, ທວນນ້ຳກະທົບກັບໂງ່ນຫີນ ແລ້ວໄຫລລົງລຸ່ມຜ່ານຂົວໄປທາງກົ້ ແອຊູໂອເຣີ.

ຂ້າພະເຈົ້າໄດ້ຕົກເຂົ້າໄປໃນແຫ່ງນັ້ນຄືຈັ່ງຊັ້ນແລ້ວ! ຂ້າພະເຈົ້າບໍ່ຮູ້ວ່າຂຸມບໍ່ງວງຍາວກືກ ເຈື່ອນໂດຍບັງເອີນຫລືວ່າແມ່ນ ໂດບີ ຕັ້ງແກ້ງເຮັດ. ກ້າມັນເປັນເລື່ອງບັງເອີນໄປແລ້ວ ຂ້າ ພະເຈົ້າກໍຈະກັບໄປສູ່ຄະລືຫາດ ເພື່ອສີດຢາຕ້ານວິຣຸດເຂັ້ມນັ້ນຊ້ຳສາ ແລະກໍເພື່ອເປັນການ ເຮັດໃຫ້ເຈົ້ານາຍມີຄວາມສະຫງົບໃຈອີກດ້ວຍ. ອີກຢ່າງຫນຶ່ງ ເງິນຂອງຂ້າພະເຈົ້າກໍຍັງປະ ໄວ້ຢູ່ແຫ່ງນັ້ນ. ແຕ່ກ້າທຸກສິ່ງທຸກຢ່າງລ້ວນແຕ່ໄດ້ມີການກະກຽມລ່ວງຫນ້າ, ຍ້ອນເຈດຕະນາ ເພື່ອຫວັງຈະປິດຊີວິດຂ້າພະເຈົ້າເດລະ? ຂ້າພະເຈົ້າຮູ້ສືກວ່າ ບາງທີບັນຫາໂຕທີ່ສອງນີ້ອາດ ຈະກືກຕ້ອງກ່ວາ. ເພາະລາວໄດ້ທົດລອງວິຣຸດຂອງຕົນຢູ່ໃນຮ່າງກາຍຂອງຂ້າພະເຈົ້າ, ຂ້າພະ ເຈົ້າບໍ່ເຊື່ອໃນເລື່ອງຄືເທບນິຍາຍຂອງລາວກ່ຽວກັບການຕິດພະຍາດຈາກງູ ເດີຍີເຣີ ນັ້ນເລີຍ, ເມື່ອລາວບໍ່ສາມາດປົວຂ້າພະເຈົ້າໃຫ້ຫາຍຈາກພະຍາດໄປໄດ້, ຢ້ານເລື່ອງມັນຈະດັງຂຶ້ນ, ແລ້ວກໍເລີຍ ...

ຂ້າພະເຈົ້າຕົກລົງໃຈລໍກ້າໄປອີກຈັກຫວ່າງສາກ່ອນ. ຫາລະປ່ອຍໃຫ້ ໂດບີ ຄືດວ່າຂ້າ ພະເຈົ້າຢູ່ໃນບໍ່ງວງຍາວນັ້ນຕະຫລອດການຫັ້ນເທາະ. ບາດແລ້ວຫາກຈະໄດ້ເຫັນດີກັນ ...

ຄົນຜູ້ຫນຶ່ງໃສ່ຫມວກແງັບນອນເຫມບໃສ່ຂີ້ດິນຢູ່ລະຫວ່າງກາງພຸ່ມໄມ້ ແລະຕັ້ງໃຈສ່ອງ ກ້ອງໄປທິດໃດທິດຫນຶ່ງທີ່ຢູ່ສູງ. ຂ້າພະເຈົ້າຈື່ຄົນຜູ້ນີ້ໄດ້ທັນທີ. ແມ່ນຫມໍນີ້ເອງທີ່ເດີຂ້າພະ ເຈົ້າຢູ່ຮ້ານຂາຍຢາມື້ນັ້ນ. ກໍແມ່ນມັນນີ້ລະທີ່ສ່ອງກ້ອງສັງເກດເບິ່ງຄະລືຫາດຂອງ ໂດບີ. ຂະ ນະນີ້ ຂ້າພະເຈົ້າພົບມັນພວມເຮັດວຽກດັ່ງກ່າວຢູ່. ແຕ່ມັນເມົາມົວສັງເກດເບິ່ງຄະລືຫາດເກີງ ຂັ້ນວ່າບໍ່ຮູ້ສືກວ່າຂ້າພະເຈົ້າໄດ້ມາຢືນຢູ່ຫ່າງຈາກຫລັງຂອງມັນພຽງສາມກ້າວເທົ່ານັ້ນ. ດຽວນີ້, ຊີວິດໄດ້ສອນໃຫ້ຂ້າພະເຈົ້າຮູ້ຈັກວ່າບໍ່ຄວນຈະໄປສອດແຊກເຂົ້າໃນວຽກງານຂອງຜູ້ອື່ນ, ສ່ວນ

ເລື່ອງຮູ້ຈັກລຶ້ງເຄີຍກັນຢ່າງບັງເອີນນັ້ນ ຂ້າພະເຈົ້າເບື່ອມັນຈົນຊິຮາກອອກແລ້ວ. ແຕ່ໃບໄມ້ແຫ້ງຊ້ຳດັງສາດໆຢູ່ລຸ່ມຕີນຂອງຂ້າພະເຈົ້າ ແລະເປັນເຫດເຮັດໃຫ້ຄົນຜູ້ນັ້ນຫລຽວມາ.

- ເຈົ້າຕ້ອງການຫຍັງຫວະ? - ມັນຖາມດ້ວຍນ້ຳສຽງຂຸ່ນເຄືອງ. ໃບຫນ້າມົນມຶ້ງຄຶ້ງພ້ອມດ້ວຍຮອຍຫ່ຽວຫລາຍໆຮ່ອງເທິງໃບຫນ້ານັ້ນໄດ້ບົ່ງບອກເຊິ່ງທ່າທີທີ່ບໍ່ພໍໃຈເປັນຢ່າງຍິ່ງ.

- ຂ້ອຍບໍ່ມີເຈດຕະນາຈະມາລົບກວນເຈົ້າ, - ຂ້າພະເຈົ້າຕອບໄປຢ່າງຫຍາບຊາ. - ແຕ່ເປັນຫຍັງເຈົ້າຈຶ່ງມານອນຢຽດຂວາງທາງຢູ່ແບບນີ້, ເຈົ້າຢາກກາຍເປັນເຫຍື່ອໃຫ້ກົ້ງລົດຍົນຂອງຂ້ອຍຫວະ...

- ຫີນທາງຢູ່ລຸ່ມພຸ້ນ, - ມັນເວົ້າຢ່າງໂມໂຫ. - ຫນີໄປໃດ. ຮູບຮ່າງເຈົ້າມັນເປັນຕາຍ້ານ... ຄືຊິແມ່ນເຈົ້າຫາກໍໄປຍາມຫມໍ້ນະຮົກມາຕິເບາະ...

- ເຈົ້າດວງກຶກ, - ຂ້າພະເຈົ້າເວົ້າ. - ຢູ່ຫັ້ນມີຖ້ຳຫີນນິມພາທີ່ງາມເລີດ. ລາກ່ອນເດີ.

ແລ້ວຂ້າພະເຈົ້າກໍລົງໄປຍັງຫີນທາງໃຫຍ່ທີ່ຢູ່ທາງລຸ່ມພຸ້ນ. ຫມໍນັ້ນເອີ້ນຂ້າພະເຈົ້າໃຫ້ກັບຄືນມາອີກ.

- ແມ່ນຫຍັງ? - ຂ້າພະເຈົ້າງວາກຄືນມາ. - ເຈົ້າຕ້ອງການຫຍັງ?

ຂະນະນີ້ມັນຍືນຢູ່ຂ້າງກົກແປກ, ຈັບຫມວກເງັບຍົກຂຶ້ນດ້ວຍຄວາມສົດຊື່ນແລະຍິ້ມຫົວ.

- ຢ່າໃຈຮ້າຍໃຫ້ຂ້ອຍເດີ. ຂ້ອຍເປັນພຽງຄົນທຸກຍາກຜູ້ຫນຶ່ງແລະໄປຊອກພັກໃສ່ແຮ້ວນົກຊື່ໆດອກ. ກ້ອງສ່ອງນີ້ຊ່ວຍໃຫ້ຂ້ອຍສາມາດຊອກຫາຮັງຂອງມັນແລະເລືອກຫາບ່ອນຫ້າງແຮ້ວຊື່ໆດອກ.

- ເລື່ອງນັ້ນມັນບໍ່ກ່ຽວຫຍັງເຖິງຂ້ອຍ, - ຂ້າພະເຈົ້າຕອບຢ່າງເຢັນຊາແລ້ວຫນີປະມັນໄປ.

## VI

ທ່ານ ທັອມບຣິດ ບໍ່ໄດ້ເຖົ້າລົງໄປຈັກຫນ້ອຍເລີຍ ຖ້ານັບແຕ່ມື້ທີ່ຂ້າພະເຈົ້າພົບກັບເພິ່ນຄັ້ງສຸດທ້າຍນັ້ນ. ເພິ່ນຄ່ອຍໆປ່ອນຫົວທີ່ເຫລື້ອມມົງໆຄືຫມາກບານນັ້ນອອກມາຈາກປ່ອງຢ້ຽມດ້ວຍຄວາມເຢືອກເຢັນ ໃນຂະນະທີ່ຂ້າພະເຈົ້າເຂາະໆຂອບປະຕູ ແລະຢືນຢູ່ເດີ່ນເອີ້ນໃສ່ເພິ່ນຄືກັບພວກແຂກຂາປະຈຳຂອງຮ້ານອາຫານ "ລາຊາເສືອ" ເຄີຍປະຕິບັດກັນມາ ຖ້າເຂົາເຈົ້າມີຄວາມຈຳເປັນຢາກເວົ້າເລື່ອງວຽກງານທີ່ປິດລັບຢ່າງໃດຢ່າງຫນຶ່ງ.

- ສະບາຍດີທ່ານທ້ອມ, - ຂ້າພະເຈົ້າເວົ້າໂດຍພະຍາຍາມບໍ່ເຮັດໃຫ້ນ້ຳສຽງມີຄວາມເລິກລັບເກີນຄວນ.

ດວງຕານ້ອຍທັງຄູ່ທີ່ອ່າວຈະມີສີຂຽວແດ່ທີ່ຢູ່ເທິງໃບຫນ້າຕຸ້ຍອຸ້ຍລຸ້ຍຂອງລາວ ບໍ່ໄດ້ສະແດງວ່າ ລາວພ້ອມທີ່ຈະສົນທະນາປາໄສນຳເລີຍ.

- ສະບາຍທ້າວ, - ເພິ່ນຕອບພຸມໆດ້ວຍຄວາມເບື່ອຫນ່າຍ, ເປັນທີ່ຈະແຈ້ງແລ້ວວ່າເພິ່ນພວມລໍຖ້າຟັງວ່າຂ້າພະເຈົ້າຈະເວົ້າຫຍັງອອກມາ.

ໃນການພົວພັນວຽກງານ ທ່ານເຈົ້າຂອງຮ້ານອາຫານຜູ້ນີ້ມັກໃຫ້ເວົ້າສັ້ນໆກະທັດລັດແລະຈຶດເຈນ. ຍ້ອນແນວນັ້ນ, ໂດຍໃຊ້ນ້ຳສຽງອັນງ່າຍດາຍຂອງເພື່ອນເກົ່າຄົນຫນຶ່ງ, ຂ້າພະເຈົ້າສະເຫນີ:

- ນີ້, ລຸງທ້ອມ, ຟັງພີ້ກ່ອນ, ລຸງຕ້ອງການຊື້ໂຄມ "ເອີມີ" ແລະກະຕຶກໃສ່ນ້ຳຂອງເຮົາແດ່ເບາະ? ມັນມີຄວາມຈຳເປັນທີ່ສຸດສຳລັບການໄປທ່ອງທ່ຽວແລະໄປທ່ຽວຫລິ້ນທາງໄກ.

- ໂທ້ເອີຍ, ເລື່ອງມະຫລຶດປຶດປື່ແບບນີ້ ເຈົ້າກໍຍັງເຮັດໃຫ້ຂ້ອຍຕ້ອງເສຍວຽກເສຍງານໄປຍ້ອນ! - ທ່ານ ບຣິດ ເວົ້າຂຶ້ນດ້ວຍສຽງອອບໆ, ທ່າທາງບໍ່ພໍໃຈ, ພ້ອມກັນນັ້ນກໍຍື່ດຄີງອອກປ່ອງຢ້ຽມຕື່ມເພື່ອແນມເບິ່ງຮູບຮ່າງຂອງຂ້າພະເຈົ້າແຕ່ຕີນສຸດຫົວໃຫ້ມັນແຈ້ງກ່ວາເກົ່າ.

ເຫດການຕ່າງໆທີ່ເກີດຂຶ້ນໃນຊຸມປີທີ່ຜ່ານມານີ້ ໄດ້ສັ່ງສອນໃຫ້ຂ້າພະເຈົ້າຮູ້ຈັກເປັນເຈົ້າຕົນເອງ, ແລະຂ້າພະເຈົ້າກໍທົນຕໍ່ການເບິ່ງແບບຕາຄົມຄືຄົມມີດຂອງທ່ານ ບຣິດ ນັ້ນຢູ່ດ້ວຍຄວາມຫຸ່ນຫ່ຽງ, ຍິ່ງກ່ວານັ້ນຍັງໃຊ້ມືລູບໆຄຳໆຊອງຢາສູບທີ່ຍັງເຫລືອບໍ່ພໍເທົ່າໃດກອກຢູ່ໃນກົງນັ້ນນຳອີກ.

- ເອົາລະ, ເອົາເຄື່ອງມາເບິ່ງກ່ອນ, ເພື່ອນ, - ທ່ານ ບຣິດເວົ້າ, ປະກົດວ່າມີຄວາມອ່ອນໂຍນລົງກ່ວາເກົ່າແດ່ເລັກນ້ອຍ ແລະວາງໃບໄພ້ເຊິ່ງພວມກຳຢູ່ໃນມືນັ້ນລົງກັບຂອບປະຕູປ່ອງຢ້ຽມ...

ຂ້າພະເຈົ້າເຂົ້າໃຈໄດ້ໂລດວ່າຂ້າພະເຈົ້າມາລົບກວນລາວໃນຂະນະທີ່ພວມເມົາຫລິ້ນໄພ້ຢູ່. ຂ້າພະເຈົ້າຂໍໂທດ, ແຕ່ທ່ານ ບຣິດບໍ່ໄດ້ເອົາຫົວຊາເລີຍ, ແລະກໍປະກົດວ່າເດ່ມືທີ່ເຕັມໄປດ້ວຍເສັ້ນເອັນແດງນັ້ນມາກຳເອົາໂຄມ "ເອີມີ" ຂອງຂ້າພະເຈົ້າໄປດ້ວຍຄວາມຈຳໃຈ.

- ເຈົ້າລັກມາຫວະ? - ທ່ານ ບຣິດຜ່ອນສຽງອອດໆຂອງຄົນລົງມາເປັນສຽງຊຶບຊັບລະມັດລະວັງ, ແລ້ວກໍແນມຈີ້ຈໍ້ເບິ່ງຂ້າພະເຈົ້າອີກ.

- ບໍ່ເຖິງຂັ້ນນັ້ນດອກ, - ຂ້າພະເຈົ້າຕອບແລະໃດ້ກອກຢາຢ່າງຟ້າວຟັ່ງ. - ແຕ່ຈໍາເປັນໄດ້ເລີກອາຊີບເຊິ່ງທໍາອິດເຮົາຄຶດວ່າມັນມີປະໂຫຍດນັ້ນໄປ. ບໍ່, ບໍ່ມີມື້ທີ່ເຮົາຈະກັບໄປສູ່ແດນນໍລະນະນັ້ນອີກ.

- ໂຕມາແຕ່ ເວສະລີ ຫວະ?

- ມາແຕ່ພຸ້ນກໍຊິກ່ຽວຫຍັງເຖິງລູລະ? - ຂ້າພະເຈົ້າຖາມ. - ເຮົາຕ້ອງການບ່ອນພັກທີ່ສະດວກສະບາຍຈັກສອງສາມມື້, ບ່ອນທີ່ບໍ່ມີຕໍາຫລວດບັກໃດຈະແນມເຫັນເຮົາໄດ້.

ຂະນະດຽວກັນນັ້ນ ທ່ານ ບຣິດກໍກົດດຸມໂຄມ "ເອີມີ", ສັງເກດເບິ່ງແສງທີ່ຮຸ່ງໃສຂອງມັນແລະປະກົດວ່າລາວມີຄວາມພໍໃຈໃນສິ່ງນີ້, ແຕ່ຂ້າພະເຈົ້າກໍເດົາຄວາມມີຊັ້ນເຊີງຂອງລາວໄດ້. ດວງຕາເວັນປະກົດວ່າລັບລ່ຽມໄປຄັກແນ່ແລ້ວ, ທ່ານ ບຣິດທໍາເຊັ່ນນັ້ນກໍເພື່ອຈະແນມເບິ່ງຂ້າພະເຈົ້າໄດ້ຢ່າງຊັດເຈນກ່ວາໃນຂະນະທີ່ຟ້າພວມສະລຸ້ມມືດຢູ່ນີ້. ຂ້າພະເຈົ້າຫຍັບເຂົ້າມາໃກ້ໆ ເພື່ອໃຫ້ແສງສະຫວ່າງເຍືອງເບິ່ງຫນ້າຂອງຂ້າພະເຈົ້າໄດ້ແຈ່ມແຈ້ງ.

- ນີ້, ເພື່ອນ, - ທ່ານ ບຣິດເວົ້າອັອດໆຂຶ້ນ, - ເຮົາບໍ່ເຄີຍເຫັນຫນ້າໂຕມາກ່ອນເລີຍ. ຫລືວ່າໂຕເປັນຫນຶ່ງໃນຈໍາພວກທີ່ລັດຈີ້ເອົາເຄື່ອງຄົນຜູ້ທີ່ສັນຈອນໄປມາໃນຍາມຄໍ່າຄືນເດິກດື່ນນັ້ນກະບໍ່ຈັກ?

ອີກຄັ້ງຫນຶ່ງທີ່ຂ້າພະເຈົ້າຕ້ອງທົນຕໍ່ການແນມເບິ່ງແບບສຽບແທງຂອງທ່ານ ບຣິດ.

- ລຸງ ທັອມ, ເຮົາບໍ່ເຮັດດອກອາຊີບຕາຍໆແບບນັ້ນ, - ຂ້າພະເຈົ້າກ່າວດ້ວຍຄວາມຈິງໃຈ. - ແຕ່ບໍ່ແມ່ນວ່າຜູ້ໃດກໍຈະອີ່ມຫນໍາສໍາລານຄືກັນຫມົດ. ເຮົາຢາກຂາຍເຄື່ອງຂອງເຫລົ່ານີ້ເພື່ອໄປຊື້ຂອງກິນ. ອີກຈັກສອງສາມມື້ເຮົາກໍຈະຫວີດຈາກໂຊກຮ້າຍນີ້ດອກ.

ທ່ານ ບຣິດ ວາງໂຄມ "ເອີມີ" ລົງໃສ່ຂອບປະຕູບ່ອງຢ້ຽມ.

- ນີ້ເພື່ອນ, ເຮົາຫລຽວເບິ່ງໂຕແລ້ວ ຮູ້ສຶກວ່າໂຊກຮ້າຍນັ້ນມັນກໍອາດຈະຕົກມາຮອດເຮົານໍາກໍເປັນໄດ້ໃດ, - ລາວເວົ້າພຸມໆຢ່າງຄົນມີປະສົບການແລະແນມເບິ່ງກະຕິກໃສ່ນໍ້າທີ່ມີຈອກເງິນນ້ອຍຕິດຢູ່ນັ້ນດ້ວຍຄວາມຈົດຈໍ່ ແລະ ຫິວກະຫາຍ.

- ແຕ່ ລຸງທ້ອມເອີຍ, ລຸງເປັນຄົນມີເມດຕາກ່ວາເພິ່ນໝົດໃນເຂດນີ້, - ຂ້າພະເຈົ້າເວົ້າ. - ທຸກໆຄົນໃນເວສະລີ ແລະ ແອຊູໂອເຣີ ລ້ວນແຕ່ຮູ້ດີວ່າບໍ່ມີໃຜຫລິ້ນໄພ້ເກັ່ງໄປກ່ວາທ້ອມບຣິດຂອງພວກເຮົາ, ສ່ວນນ້ຳໃຈດີເກື້ອກູນຊົດຊ່ວຍພີ່ນ້ອງໄທບ້ານໄທເມືອງຂອງລຸງນັ້ນກໍ...

ຂ້າພະເຈົ້າຕ້ອງຖິ້ມໃບໄພ້ສຸດທ້າຍອອກມາ ໃສ່ໜ້າ ບຣິດ ຄືຄວາມສຳອອຍອັນຄ່ອງແຄ້ວ, ແບບດຽວກັນກັບ ໂດບີ ເຄີຍໃຊ້ເພື່ອວາງແຮ້ວໃສ່ຂ້າພະເຈົ້າຫວ່າງບໍ່ດົນມານີ້. ມັນສະຫມອງຂອງບຣິດບໍ່ແມ່ນວ່າຖືກສ້າງຂຶ້ນມາດ້ວຍຫີນ, ດ້ວຍເຫດນັ້ນອີຕາເຖົ້າຕຸ້ຍນີ້ຈຶ່ງໃຈອ່ອນລົງຄືກັບເຂົ້າໜົມກວນໝາກໄມ້ຫວານສຳລັບວັນບຸນຊຶ່ງຫາກໍກອກລົງໃສ່ເຂົ້າໃຫມ່ໆ.

- ເອີ, ຈັ່ງໃດກໍຕ້ອງໄດ້ຊ່ວຍກັນຢູ່ດອກ, - ທ່ານ ບຣິດພຶມພຳດ້ວຍສຽງຜ່າວໆ. - ເອົາລະ, ເພື່ອນ, ເຂົ້າມາໃນຫ້ອງຮັບແຂກສຳລອງຫັ້ນສາ. ແຕ່ຊີໂດວ່າແນວໃດລະ...

- ດະເຢັກ.

ບຣິດ ເຮັດໜ້າຫຍູ້ເຂົ້າ.

- ດະເຢັກ, ໂຕມັນສິກະປົກຄືຟອຍກວາດເຮືອນຄົວນີ້.

- ເຮົາອອກຈາກບ່ອນເຮັດວຽກແລ້ວກໍມານີ້ໂລດ, - ຂ້າພະເຈົ້າຄຶດວ່າຄວນຈະຕອບລາວແບບນີ້. - ແລະຢູ່ບໍ່ພຸ້ນ ເຂົາເຈົ້າຍັງບໍ່ທັນໄດ້ສ້າງຫ້ອງອາບ ແລະນ້ຳອຸ່ນໃຫ້ພວກເຮົາເທື່ອ.

ທ່ານ ບຣິດ ຍິ້ມຫົວແບບກວນໆ.

- ແຕ່ນັບເປັນເທື່ອທຳອິດໃນຊີວິດ ທີ່ເຮົາໄດ້ເຫັນກຳມະກອນບໍ່ຖ່ານລົງໄປອອກເຫື່ອເຫແຮຢູ່ໃນອຸໂມງໃສ່ເກີບດຸມຊັ້ນດີ, ຮັດກາລະວັດໄຫມ ແລະຖືກະຕິກນ້ຳຊັ້ນດີເລີດໄປນຳແບບນີ້.

ຂ້າພະເຈົ້າໄດ້ແຕ່ຫັນໃຈໃຫຍ່ຢູ່, ສ່ວນທ່ານ ບຣິດ ກໍຄົງຈະເບື່ອຕໍ່ການສືບສາວລາຍລະອຽດກ່ຽວກັບຊີວະປະຫວັດຂ້າພະເຈົ້າແລ້ວ.

- ເອົາລະ, ຖ້າຈັກບຶດ, ເຮົາຊິອອກໄປດຽວນີ້ລະ...

- ໂອ, ຄວາມຄຶດທີ່ເປັນມິ່ງຄຸນຂອງເຮົາຕໍ່ຄົນລົ້ງເຄີຍກັນມາກ່ອນຄືລຸງນີ້ ມັນບໍ່ເຄີຍພາດ

ນ່າ! - ຂ້າພະເຈົ້າຕໍາຫນາກຍໍໃຫ້ຕື່ມພ້ອມທັງຈັບເອົາກະຕິກນໍ້າແລະໂຄມໄຟນັ້ນຄືນມາແຕ່ຂອບປ່ອງຢ້ຽມດ້ວຍຄວາມມີສະຕິລະວັງຕົວ.

ທ່ານບຣິດຍັງບໍ່ລືມກໍາເອົາໃບໄພ້ຂອງລາວຂຶ້ນໄປແລະອັດປະຕູປ່ອງຢ້ຽມໄວ້.

ທີ່ເດີ່ນ, ທ່ານ ບຣິດ ຊີ້ມືໃສ່ສາງຫລັງຫນຶ່ງໃນຫມູ່ສະຖາປະນິຍະກໍາສໍາຮອງຫລັງຕ່າງໆດ້ວຍດິນຂໍເຫລົ່ານັ້ນ, ເຊິ່ງເຂົາເຈົ້າອາດຈະຫລິ້ງທາງຍ້ອນຮ່ອມຊອຍອັນສະຫລັບສັບຊ້ອນຂອງມັນປານຢູ່ໃນບໍ່ງວງຍາວເອົາໂລດ, ແລ້ວຂ້າພະເຈົ້າກໍໄດ້ເຂົ້າໄປຍັງສາງນ້ອຍຫລັງຫນຶ່ງ.

- ບິດໂບຍ ມາພັກຢູ່ນີ້ເລື້ອຍ, - ທ່ານ ບຣິດເວົ້າດ້ວຍຄວາມພາກພູມໃຈ. - ເປັນຫນ້າເສຍດາຍແຕ່ວ່າລາວກຶກແຂວນຄໍສາແລ້ວ. ແຕ່ນັ້ນມັນເປັນພຽງເລື່ອງເຂົ້າໃຈຜິດກັນຊື່ໆດອກ.

ບິດໂບຍ ບໍ່ໄດ້ສ້າງຄວາມສົນໃຈຫຍັງໃຫ້ແກ່ຂ້າພະເຈົ້າເລີຍ. ຂ້າພະເຈົ້າມີແຕ່ຕ້ອງການສະສາງທຸລະກິດໃຫ້ໄວເທົ່ານັ້ນ, ແລະໃນທີ່ສຸດ ພວກເຮົາກໍຕົກລົງກັນໄດ້.

- ລຸງ ທ້ອມ, ເປັນອັນວ່າຕົກລົງກັນແລ້ວແມ່ນບໍ່? ຈົ່ງຮັບເອົາສິນຄ້າລາຄາຜ່ອນເທົ່າກັບຫນຶ່ງສ່ວນສີ່ຂອງລາຄາທ້ອງຕະຫລາດນີ້ໄປສາ.

ທ່ານ ບຣິດ ມີອາການພໍໃຈເປັນຢ່າງຍິ່ງ:

- ນີ້ ດະເຢັກ, ໂຕຈະບໍ່ຜິດຫວັງດອກ, ຈົ່ງຈື່ຄວາມເວົ້າຂອງເຮົາ. ພວກແຂກຜູ້ມີກຽດທີ່ມາພັກອາໄສຢູ່ນີ້ ມັກຫ້ອງນີ້ສະເຫມີ. ເອີນີ້, ເຮົາເບິ່ງໂຕມັນບໍ່ຜິດຫຍັງກັບນົກຈອກທີ່ຫລົດຈາກລູກປືນຂອງນາຍພານນີ້ແຫລະ. ພັກຜ່ອນສາ. ເຮົາຈະສັ່ງໃຫ້ຄົນມາຮັບໄຊ້ໂຕ. ຫລັງຈາກອາບນໍ້າຊໍາລະຮ່າງກາຍແລະກ່າຍເຄື່ອງນຸ່ງຂອງກື, ແລ້ວໃຫ້ໂຕລົງໄປຫ້ອງໂຖງພຸ້ນດີ. ມື້ນີ້ເຮົາໄດ້ແຕ່ງອາຫານແລງຊັ້ນດີເພື່ອລ້ຽງແຂກ. ມີແກງຫົວງົວນ້ອຍ, ເຍື່ອງທີ່ສອງແມ່ນຕົ້ມຊີ້ນແກະໃສ່ມັນຜະລັ່ງ. ສ່ວນເຄື່ອງດື່ມ, ນອກຈາກເບຍຫນຶ່ງຈອກແລ້ວ, ໃຜດື່ມຫຍັງຕ້ອງໄດ້ຈ່າຍເງິນເອງ, - ແຈ້ງຂ່າວແລ້ວ. ທ່ານ ບຣິດ ກໍປະຂ້າພະເຈົ້າໄວ້ຜູ້ດຽວໃນບ່ອນຢູ່ໃຫມ່ນີ້.

ພໍອອກໄປຫລົດ ທ່ານ ບຣິດ ກໍບີບໂຄມ "ເອີມີ" ຂຶ້ນໂລດ. ໂຄມຮຸ່ງວາບຂຶ້ນບາດຫນຶ່ງຄ້າຍກັບວ່າມັນກ່າວຄໍາອໍາລາຕໍ່ຂ້າພະເຈົ້າ. ຂ້າພະເຈົ້າເລີ່ມຮູ້ສຶກ ເສຍດາຍທີ່ໄດ້ປ່ອຍມັນຫລຸດມືໄປ. ຄວນແທ້ທໍາອິດແມ່ນຂາຍແຕ່ກະຕິກໃສ່ນໍ້າສາກ່ອນ. ເພາະວ່າໂຄມເຂົາບໍ່

ຫນ່ວຍນີ້ຄືເພື່ອນພາທາງຜູ້ບໍລິສຸດ ແລະໄວ້ໃຈໄດ້ຂອງຂ້າພະເຈົ້າໃນການໄປທ່ອງທ່ຽວຢູ່ໃຕ້ດິນ ດັ່ງນີ້. ຖ້າບໍ່ມີໂຄມ "ເອີມີ" ຕິດຕົວໄປແລ້ວ ຂ້າພະເຈົ້າກໍບໍ່ສາມາດອອກຫວິດຈາກບໍ່ງວງຍາວ ອັບປີ້ນນັ້ນໄປໄດ້.

ຂ້າພະເຈົ້ານອນພັກຜ່ອນຢູ່ເທິງຕັ່ງຍາວຂາດຫນ່ວຍນັ້ນປະມານສິບຫ້ານາທີກໍມີສຽງເຂາະ ປະຕູ. ເດັກນ້ອຍແມ່ຍິງມຸມມວຍຄົນຫນຶ່ງ ຍ່າງດິນເບົາໄດ້ມາປະກົດຕົວທີ່ປາກປະຕູ.

- ເຈົ້ານາຍຝາກເສື້ອຄຸມຜືນນີ້ມາໃຫ້ອາວ ແລະສັ່ງໃຫ້ຫລານບອກວ່າ ນຸ່ງຊຸດນີ້ເຫມາະ ສົມກັບງານລ້ຽງແຂກທີ່ສຸດ, - ມັນເວົ້າດ້ວຍສຽງແຈດໆແບບເຍາະເຍີ້ຍ.

ຕານ້ອຍໆຂອງມັນ ເຫລື້ອມຍິບໆຢູ່ຄືເມັດແກ້ວສີໃສຂອງລູກຕິດຢູ່ເທິງຫົວດຸກກະຕາຮູບ ຫມູນີ້ແຫລະ. ມັນໄຂຫໍ່ຕ່າງໆທີ່ຫາກໍຖືມາຮອດນັ້ນແລ້ວເວົ້າອອກເປັນລວາດດຽວວ່າ:

- ຫລານຊື່ວ່າ ແກັດ. ຫລານ ມີຫນ້າທີ່ຮ່າຍນ້ຳໃສ່ກະດຸກຕ່າງໆ. ຫລານຮູ້ຈັກປັດ ເຮືອນແລະໃຊ້ເພງູ, ກູໂຕະຕັ່ງ. ຖ້າອາວຕ້ອງການໃຊ້ວຽກຫຍັງແລ້ວກໍໃຫ້ຮ້ອງອອກໄປ ທາງເດີ່ນພຸ້ນ: "ແກັດ, ມານີ້!" ເທົ່ານັ້ນ ຫລານຈະມາປະກົດຕົວໂລດ. ຫລານລ້າງຫົວ ມົນຢູ່ເຮືອນຄົວພຸ້ນ, ແລ້ວຊອຍເພື່ອຕົ້ມ...

- ຫລານອາຍຸຈັກປີແລ້ວ? - ຂ້າພະເຈົ້າຖາມ, ທັງຄຶດມ່ວນໃຈຍ້ອນຄວາມເວົ້າອັນມີຊີ ວິດຊີວາຂອງມະນຸດແລະນິດໃສເປີດເຜີຍໄຮ້ດຽງສາຂອງນາງນ້ອຍຜູ້ທີ່ໄດ້ເປີດເຜີຍເລື້ອງວຽກ ງານອັນນ້ອຍໆຂອງຕົນມາໃຫ້ຂ້າພະເຈົ້າຮູ້ຈັກ.

- ເກືອບຊິຮອດເກົ້າປີແລ້ວ.

ຢູ່ທີ່ເດີ່ນມີສຽງແມ່ຍິງຄົນຫນຶ່ງຮ້ອງແຜດຂຶ້ນ:

- ແກັດມານີ້ໄວ!

ຕານ້ອຍໆທັງຄູ່ຂອງນາງນ້ອຍມີແວວຍິ້ມແຍ້ມຢ່າງພິດສະດານ.

- ນັ້ນແມ່ນຍາແມ່ ບຣິດ. ແຕ່ບໍ່ເປັນຫຍັງດອກ, ປະໃຫ້ເພິ່ນຮ້ອງແຜດຂຶ້ນອີກຈັກເທື່ອ ສອງເທື່ອກະໄດ້ຢູ່.

- ແກັດ, ປະໃຫ້ເພິ່ນຖ້າມັນບໍ່ດີໃດ, - ຂ້າພະເຈົ້າເວົ້າຢ່າງເຄັ່ງຂຶມ, ເປັນອັນວ່ານາງ ນ້ອຍຈໍາຕ້ອງໂດດຍອດອອກຈາກຫ້ອງໄປ.

ຂ້າພະເຈົ້າອາບນ້ຳຊຳລະຮ່າງກາຍສຳເລັດຮຽບຮ້ອຍແລ້ວ ແຕ່ຍັງຈື່ຕົນເອງຈາກແວ່ນທີ່ແຂວນໄວ້ເທິງອ່າງລ້າງຫນ້ານັ້ນບໍ່ໄດ້ເລີຍ.

ບຣິດຝາກເສື້ອປົກບ່າງທີ່ຕົກສີພື້ນຫນຶ່ງ ສົ້ງສາຍພາຍໂດຫນຶ່ງ ແລະຫມວກແງັບຫັກຫົວຫນຶ່ງມາໃຫ້ຂ້າພະເຈົ້າ. ຫລັງຈາກອາບນ້ຳຊຳລະຮ່າງກາຍແລ້ວຂ້າພະເຈົ້າກໍກ່າຍເຄື່ອງນຸ່ງແລະຄຶດ: "ຕັ້ງແຕ່ມື້ອື່ນເຮົາຈະຊອກຮູ້ທຸກສິ່ງຢ່າງໃນ ແອຊູໂອເຣີນີ້, ແລ້ວຈະໄປໄລ່ບັນຊີກັບໂດບີ".

## VII

ພາຍໃນຫ້ອງໂຖງຂອງຮ້ານອາຫານ "ລາຊາເສືອ" ນັ້ນ, ຄວັນຢາສູບແລະອາຍຊຸ່ມພຸ່ງກຸ່ມໆຂຶ້ນມາຈົນເປັນກ້ອນເມກ. ມັນເຫນັງຕີງໄປມາແລະສັ່ນສາຍຂຶ້ນເມື່ອປະຕູເຮືອນຄົວກຶກໄຂອອກ. ກິ່ນຊີ້ນແກະຈືນ, ຜັກກະລຳປີສົ້ມ ແລະອາຍເບຍທີ່ຂຶ້ນແປ້ງເຫລົ້າກຸບກຸ້ມແລ້ວນັ້ນສົ່ງອອກມາຈາກເຮືອນຄົວ. ແສງໄຟສີແດງຈາກເຕົາຜິງສ່ອງທົ່ວໃສ່ຕົນຂອງຄົນທັງຫລາຍທີ່ພວມຊອງສຸມກັນຢູ່ອ້ອມໂຕະຂາຍອາຫານ. ທາງດ້ານຫລັງໂຕະນັ້ນ, ທ່ານບຣິດ ພວມກອກເຫລົ້າປຸກງລົງໃສ່ຈອກນ້ອຍຢູ່ດ້ວຍທ່າທາງອັນເຄັ່ງຂຶມ. ຈອກຫນ່ວຍໃຫຍ່ທີ່ກ້ານມັນຂົດກ່ອງລົງລຸ່ມນັ້ນພວມປ່ອຍກຸ່ມຄວັນຫນາປົກອອກມາ. ແຕ່ລະຄັ້ງທີ່ທ່ານ ບຣິດ ຮົ່ນຢາສູບເຂົ້າໄປປົກຫນຶ່ງນັ້ນຈອມດັງຂອງເພິ່ນກໍກຶກແສງໄຟແດງສ່ອງໃສ່ຮຸ່ງວາບຂຶ້ນບາດຫນຶ່ງ. ດ້ວຍວາດຊົງອັນຄ່ອງແຄ້ວ, ລີ້ນແລະຮິມສົບຂອງທ່ານ ບຣິດຄ່ອຍໆຍູ້ກອກຢາຈາກແຈສົບເບື້ອງນີ້ໄປສູ່ເບື້ອງນັ້ນໄດ້ຢ່າງແນບນຽນ, ທັງຄິດໄລ່ເງິນ, ທັງໂອ້ລົມສົນທະນາກັບຄົນເປັນສິບໆພາບດງວ, ຄອນໆກໍເອີ້ນດັ່ງໄປທາງເຮືອນຄົວ.

– ຈອກທີ່ສອງເບາະ? ເຊີນທ່ານ...ຂໍຄືນເງິນທອນໃຫ້ທ່ານ...ແກັດ, ມານີ້! ເປກີ! ຢ່າຊິນັ່ງອ້າປາກຫາວເອົາແຕ່ແມງວັນຢູ່ຫັ້ນຫລາຍ. ມັນບໍ່ແຊບຄືພວກສູຄຶດນັ້ນດອກ...ເປກີ ເອົາເບຍສອງຈອກນີ້ໄປແຈເບື້ອງຊ້າຍພຸ້ນໃຫ້ພວກທ່ານ...

ນັ່ງຊອງສຸມກັນຢູ່ຂ້າງໂຕະໃຫຍ່ທີ່ປຽກເປື້ອນໄປດ້ວຍໄຂມັນແລະນ້ຳຈາກເຄື່ອງກິນ, ເຄື່ອງດື່ມນັ້ນແມ່ນພວກຊາວເຮືອ, ກຳມະກອນແບກຫາມປະຈຳທ່າກຳປັ່ນ, ກຳມະກອນບໍ່ກ່ານ

ຫີນທີ່ ແອຊໂອເອີ, ແລະພວກທີ່ມີນິດໃສມິດງຽບ ຊຶ່ງເຂົາເຈົ້າຈະມັກແຕ່ນັ່ງສູບຢາແລະຫາງຽງ ຫູຟັງເບິ່ງວ່າມີເລື່ອງຫຍັງພວມເກີດຂຶ້ນຢູ່ໃນກ້ອງລຸ່ມຟ້ານີ້.

ເມື່ອແນມເຫັນຂ້າພະເຈົ້າ, ທ່ານ ບຣິດ ກໍເງີກຫົວໄປທາງໂຕະນ້ອຍເປົ່າຫວ່າງຫນ່ວຍ ຫນຶ່ງ, ຢູ່ຂ້າງໂຕະນັ້ນມີຕັ່ງອີ້ໄມ້ຫນ່ວຍຫນຶ່ງເຊິ່ງມີຫລັງເທິງສູງ. ນັບວ່າເປັນບ່ອນທີ່ເຫມາະ ສົມ. ໂດຍອາໃສຫລັງຕັ່ງອີ້ເປັນບ່ອນກຳບັງ, ຂ້າພະເຈົ້າອາດສາມາດດັກຟັງເລື່ອງລາວທຸກ ຢ່າງທີ່ເຂົາເຈົ້າໂອ້ລົມສົນທະນາກັນຢູ່ໃນຮ້ານອາຫານນີ້ ແລະຜ່ານຈາກແວ່ນໃຫຍ່ທີ່ແຂວນຢູ່ ເທິງຕູ້ໃສ່ຂອງກິນຢູ່ເບື້ອງຫລັງໂຕະຂາຍອາຫານນັ້ນຂ້າພະເຈົ້າສາມາດແນມເຫັນເຫດການ ທີ່ ພວມເກີດຂຶ້ນຢູ່ໃນນີ້ ໄດ້ທຸກຢ່າງ. ບາງທີ ບິລໂບຍ ຜູ້ກ້າຫານອາດເຄີຍມານັ່ງຢູ່ບ່ອນນີ້?

ເປກີ ພິມກູດສີທອງນຳເອົາເຄື່ອງຮັບປະທານມາໃຫ້ຂ້າພະເຈົ້າ. ຂ້າພະເຈົ້າຫຍໍ້າກະດູກ ແກະອ່ອນຕ່ອນຫນຶ່ງ. ເຂົາເຈົ້າພາກັນຫລິ້ນໄພ້ຢູ່ຂ້າງປະຕູບ່ອງຢັງມພຸ້ນ. ສຽງເນົາຫລິ້ນແລະ ສຽງປີ້ບສຽງໂຮດັງລັ່ນຂຶ້ນ. ພາຍຫລັງທີ່ດື່ມເຫລົ້າຢູ່ຂ້າງໂຕະຂາຍເຄື່ອງນັ້ນແລ້ວ, ໃຜໆກໍຍ່ອມ ຄືວ່າຕົນມີພັນທະໄປຢູ່ໃກ້ກັບພວກຫລິ້ນໄພ້ນັ້ນແລະພົ່ນຄວາມເວົ້າທີ່ເຜັດມັນອອກມາ.

- ນາຍເກລີ ຍັງບໍ່ທັນໄດ້ກິນເທື່ອ...ບໍ່ຕ້ອງການເກັບຫມາກແອັດໄວ້!

- ຮາຮ່າ! ຫນ້າຫມາກແກ່ງລົງໄປ!

ດວງຕາອັນແຫລມຄົມຄູ່ຫນຶ່ງເບິ່ງແລ້ວຄືຈັ່ງມີຄວາມລັງເຄີຍກັນຈົນເປັນຫນ້າສົງໃສພວມ ແນມເບິ່ງຂ້າພະເຈົ້າຢູ່ໃນແວ່ນ. ນາຍພານນົກນ້ອຍໆຄົນນັ້ນຢືນຢູ່ກັບຊາຍຊະລາມືກຸດຜູ້ຫນຶ່ງ ທີ່ຂ້າງປະຕູທາງເຂົ້າຫັ້ນ. ຫລັງຈາກນັ້ນ ເຂົາກໍຍ່າງເລາະໄປທົ່ວຫ້ອງໂກງແລ້ວເບັດຫນ້າໄປ ຍັງໂຕະຂາຍເຄື່ອງ. ບຣິດ ຍິ້ມຫົວຢ່າງສົດຊື່ນ.

- ສະບາຍດີ ພວກທ່ານ!...

ບາງທີພານນົກຜູ້ນັ້ນພວມຢູ່ໃນສະພາບທີ່ມີອາລົມອັນມ່ວນຊື່ນ. ຫມວກຂົນສັດທີ່ມີແງັບ ຍາວຫນ່ວຍນັ້ນກືກເງີກອອກໄປທາງງ່ອນ, ຄໍເສື້ອເຊີ້ມີ ກໍໄຂລະອອກ. ຫມໍເວົ້າຂຶ້ນວ່າ:

- ອາ, ທ່ານສະບາຍດີຢູ່ດີ, ເອົາລະເຫຍັນໃຫ້...ສອງຈອກເດີ, ເຫລົ້າຫມາກນາວ. ເຊີນ ດີທ່ານ ບຣັງ.

ລູງຂອງຂ້າພະເຈົ້າເດີມີສົນໆນັ້ນໄປຈັບເອົາຈອກເຫລົ້າ.

- ຂ້າພະເຈົ້າບໍ່ຂໍປະຕິເສດ.

- ເພື່ອສຸຂະພາບຂອງທ່ານ, - ພານນິກເວົ້າ. - ທ່ານດື່ມແລ້ວຈຶ່ງເລົ່າເລື່ອງນັ້ນໃຫ້ມັນສຸດສາ.

ລຸງຂອງຂ້າພະເຈົ້າແລະພານນິກ ຢືນຢູ່ຂ້າງຂ້າພະເຈົ້າພຽງສາມບາດກ້າວ, ພວກເຂົາເຈົ້າອຶກເຫລົ້າກັນແລະບໍ່ໄດ້ສົນໃຈຜູ້ໃດເລີຍ.

- ແມ່ນ, ບັກນ້ອຍຂອງຂ້ອຍມັນໂຊກຮ້າຍ, - ລຸງຂອງຂ້າພະເຈົ້າເວົ້າຢ່າງມີລວດລາຍ. - ມັນເປັນເດັກນ້ອຍຂີ້ດື້ຜູ້ຫນຶ່ງ. ຂໍພະຜູ້ເປັນເຈົ້າຈົ່ງອະໄພໃຫ້ດ້ວຍ ຖ້າຂ້ອຍຫາກເວົ້າວ່າ ມັນເກີດມາເພື່ອເປັນຄົນອັນທະພານແລ້ວມັນກໍຄືຊິບໍ່ຜິດຄວາມຈິງພໍເທົ່າໃດດອກ. ທຸກໆຄົນທີ່ແອຊູໂອເຣີ ກໍລ້ວນແຕ່ໄດ້ແນະນຳໃຫ້ພໍ່ຂອງມັນປາບມັນດ້ວຍໄມ້ແສ້, ມັນພ້ອມດ້ວຍເດັກນ້ອຍຂີ້ດື້ອື່ນໆລວມເກືອບສິບຄົນພາກັນຫມິ້ນໄປທົ່ວຂົງເຂດເທດສະບານນີ້, ມ້າງຮ້ານກີ, ຫມົ້ນລົງບໍ່ຮ້າງ. ເອີ່ນີ, ລຸງທ້ອມ ເຈົ້າພໍເລົ່າໃຫ້ຟັງໄດ້ບໍ່ວ່າ ເຈົ້າໄດ້ລາກບັກນ້ອຍຂີ້ດື້ຂອງພວກເຮົາອອກມາຈາກບ່ອງແຄບໆຄືແນວໃດ. ເອີ, ເຈົ້າພວມຄາວງກຫວະ, ລຸງ ບຣິດ? ຂອບໃຈ, ຂ້ອຍຊິດື່ມໃຫ້ຫມົດດອກ. ເວົ້າແທ້ແລ້ວກໍບໍ່ຈຳເປັນ...ເຫລົ້າແຕ່ລະຈອກມັນກໍຄືເຫລັກຕະປູແຕ່ລະດອກທີ່ຕອກລົງໃສ່ໂລງຂອງຂ້ອຍຊື່ໆດອກ. ເປັນອັນວ່າ, ພາຍຫລັງທີ່ຊັດເຊພະເນຈອນໄປທຸກຈອກທຸກແຈແລ້ວ, ບັກນ້ອຍກໍກັບມາເຮືອນ ເປື້ອນປານຜີເອົາໂລດ, ຈົນແມ່ເກົ້າ ໂອລີວີອາ ໄຫ້ຍ້ອນ ເວລາລ້າງສ່ວາຍໃຫ້ມັນຢູ່ໃນອ່າງຊັກເຄື່ອງ. ເວົ້າແທ້ແລ້ວກໍແປກຢູ່ທີ່ມັນບໍ່ຫິວສັກລົງໃນບ່ງວງທີ່ບໍ່ມີພື້ນນັ້ນ...ແຕ່ນ້ອງສາວຂອງຂ້ອຍ. ແມ່ຂອງມັນ, ແລະອາຢີດ໌ ພວກເຂົາຮັກບັກນ້ອຍນັ້ນຫລາຍແທ້ໃດ...

ຂ້າພະເຈົ້າຕື່ນສະເດີດຂຶ້ນຈົນເກືອບກະດູກຄາຄໍ, ເລື່ອງນັ້ນມັນຫມາຍເຖິງຂ້າພະເຈົ້າ. ຂະນະດຽວກັນ ພວກຫລິ້ນໄພ້ຢູ່ນັ້ນກໍກຸງກັນຂຶ້ນຕະພຶດຈົນກ້ອມສຽງເວົ້າຂອງລຸງຂອງຂ້າພະເຈົ້າໄປ. ທ່ານບຣິດ ໄດ້ເຂົ້າມາແຊກແຊງແລະປາບພວກທີ່ກຸງກັນນັ້ນໃຫ້ສະຫງົບລົງ. ແລ້ວຂ້າພະເຈົ້າກໍໄດ້ຍິນເລື່ອງທີ່ລຸງເລົ່ານັ້ນອີກ:

- ແຕ່ຖ້າທ່ານຫາກໄດ້ເຫັນມັນຕອນມັນຮຽນຈົບມັດທະຍົມ ແລະກັບມາພ້ອມກັບໃບປະກາດສະນິຍະບັດນັ້ນແລ້ວ. ມັນໂລດຄືກັບຂຸນນາງນ້ອຍນີ້ຕ່ວາ. ແຕ່ຂ້ອຍຮູ້ສຶກວ່າ ວິທະຍາໄລ

ຂອງພວກລູກຫລານຊຸນນາງນັ້ນໄດ້ເຮັດໃຫ້ບັກນ້ອຍເສຍນິດໃສ. ມັນກໍເອົາກ້ອນເງິນສຸດທ້າຍຂອງພໍ່ມັນແລ້ວອອກໄປສ້າງເນື້ອສ້າງຕົວ. ທຳອິດມັນຂຽນຫນັງສືມາບອກວ່າ ມັນພວມມີຊີວິດການເປັນຢູ່ດີ, ຫລັງຈາກນັ້ນແລ້ວກໍງຽບໄປເລີຍ. ພໍ່ຂອງມັນລໍຖ້າຟັງຂ່າວຢູ່ທຸກເວລາ, ແລ້ວກໍລໍຖ້າຕໍ່ໄປບໍ່ໄຫວອີກ. - ລຸງຂອງຂ້າພະເຈົ້າແກວ່ງຫົວວຶດໆຢູ່ດ້ວຍຄວາມໂມໂຫ, ສ່ວນຫົວໃຈຂອງຂ້າພະເຈົ້ານັ້ນມັນຊ້ຳຕີບຕັນເຂົ້າ. ເປັນອັນວ່າຂ້າພະເຈົ້າຮູ້ໄດ້ວ່າພໍ່ຂອງຂ້າພະເຈົ້າບໍ່ມີຊີວິດຢູ່ອີກແລ້ວ. ຂ້າພະເຈົ້າປ່ອຍຕົວໃຫ້ລອຍໄປຕາມຄວາມເສົ້າສະຫລົດໃຈນັ້ນ, ຂ້າພະເຈົ້າບໍ່ຮູ້ວ່າຕົນພວມຢູ່ໃສຕັ້ງດົນເຕີບ. ຫລັງຈາກທີ່ຟື້ນສະຕິຂຶ້ນມາໄດ້, ຂ້າພະເຈົ້າກໍໄດ້ຍິນລຸງເວົ້າອີກ:

- ບັກຂີ້ດື້ນັ້ນ ມັນກໍເຮັດໃຫ້ຂ້ອຍສິ້ນລະອິນແລະວິຕົກນຳຈົນເກືອບເປັນບ້າຍ້ອນ. ທ່ານລອງຄຶດໆເບິ່ງດູວ່າ, ຊຸນສານ ເຊີຍເຕີນ ເອີ້ນຂ້ອຍໄປແລ້ວບອກວ່າ: "ຂ້ອຍໄດ້ຂ່າວທີ່ແນ່ນອນວ່າ ຫລານຂອງເຈົ້າພວມນັ່ງຢູ່ໃນຄຸກແຫ່ງຫນຶ່ງຢູ່ຟາກຝັ່ງມະຫາສະຫມຸດເບື້ອງນັ້ນ". ຂ້ອຍເລີຍຕອບເພິ່ນໄປວ່າ: "ທ່ານ ເຊີຍເຕີນ, ເລື່ອງນີ້ຈະເຮັດໃຫ້ພໍ່ແມ່ຂອງມັນໂສກເສົ້າເຫງົາໃຈທີ່ສຸດ ຖ້າວ່າເຂົາເຈົ້າຍັງມີຊີວິດຢູ່. ພໍຈະມີວິທີທາງໃດຊ່ວຍເຫລືອບັກນ້ອຍໄດ້ແດ່ບໍ່ທ່ານ?" ທ່ານຈະຄຶດ ບໍ່ວ່າຂ້ອຍເປັນຫ່ວງມັນພຽງໃດ! ແຕ່ຊຸນສານຊ້ຳອ່ານກົດຫມາຍມາດຕາໃດມາດຕາຫນຶ່ງໃຫ້ຂ້ອຍແລ້ວໂມໂຫປຶງປັງຂຶ້ນ! ແຕ່ຕໍ່ມາເພິ່ນຊ້ຳເອີ້ນຂ້ອຍໄປອີກ. "ທ່ານບຣົງ, - ເພິ່ນເວົ້າຢ່າງຂຸ່ນເຄືອງ, - ດຽວນີ້ບໍ່ມີສິ່ງໃດສາມາດຊ່ວຍຫລານຂອງເຈົ້າໄດ້ແລ້ວ". ແລ້ວເພິ່ນກໍແຈ້ງໃຫ້ຂ້ອຍຊາບວ່າ ບັກນ້ອຍຖືກຕາຍດົກນ້ຳໄປນຳກຳປັ່ນຫາປາທະເລເຫລັ້ມຫນຶ່ງຢູ່ທີ່ກາລີຟໍເນຍພຸ້ນແລ້ວ. ອີກເທື່ອຫນຶ່ງຂ້ອຍຕ້ອງຖືແພໄວ້ທຸກຢູ່ເທິງແຂນເສື້ອ.

- ເລື່ອງນີ້ເປັນຫນ້າເສົ້າສະຫລົດໃຈຫລາຍ, - ພານນິກຕອບ, - ຍັງຫຍັງອີກ, ມື້ອື່ນໃຫ້ເຈົ້າເລົ່າໃຫ້ຂ້ອຍຟັງຕື່ມ, ໄດ້ບໍ່?

ລຸງຂອງຂ້າພະເຈົ້າງຶກຫົວຢ່າງໂສກເສົ້າ. ຫລັງຈາກນັ້ນເພິ່ນກໍລາກສັງຂານໄປທີ່ປະຕູ, ສ່ວນພານນິກຜູ້ນັ້ນ, ຫລັງຈາກແນມພຸ້ນແນມພີ້ແລ້ວ ກໍຍ່າງມາມໍ່ໂຕະຂອງຂ້າພະເຈົ້າ.

- ຂໍໂທດ, ບໍ່ມີບ່ອນຫວ່າງອີກແລ້ວ, ຫວັງວ່າເຈົ້າຈະອະນຸຍາດ...

ຂ້າພະເຈົ້າອ້າປາກຂຶ້ນກະວ່າຈະປະຕິເສດ, ແຕ່ພານນິກໄດ້ນັ່ງລົງຕໍ່ຫນ້າຂ້າພະເຈົ້າແລ້ວແລະດຶດນິ້ວມືແປັກບາດຫນຶ່ງ.

- ເປກີ ຄົນງາມເອີຍ! ມານີ້ຈັກຫນ້ອຍແດ່ນາງ!

ທ່ານ ບຣິດນັ່ງສະເມີ້ຍເຄີ້ຍຢູ່ເທິງຕັ່ງເຈົ້າຂອງຮ້ານຂອງກິນແຜດສຽງໃສ່ເປກີ ວ່າ:

- ຢ່າຊິນັ່ງຝັນຢູ່ຫັ້ນຫລາຍ ເປກີ! ຟ້າວໄປຫາພວກທ່ານທີ່ນັ່ງຢູ່ທາງຂວາມືຫັ້ນໄວ!

ພານນິກປິດຫມວກແງັບອອກມາແລ້ວຈັບວີງຢູ່ຄືໃບວີ.

- ຮ້ອນຫລາຍເບາະ ທ່ານ?...

ຂ້າພະເຈົ້ານັ່ງມິດຢູ່. ໃນຊີວິດນີ້ນັບເທື່ອບໍ່ໄດ້ແລ້ວທີ່ຂ້າພະເຈົ້າໄດ້ໂອ້ລົມສົນທະນາກັນກັບຄົນທີ່ບໍ່ເຄີຍຮູ້ຈັກຫນ້າ ແລະເລື່ອງນັ້ນກໍບໍ່ໄດ້ນຳເອົາປະໂຫຍດຫຍັງມາໃຫ້ແກ່ຂ້າພະເຈົ້າເລີຍ. ບັກເຕັຍນີ້ ມັນຕ້ອງການຫຍັງຈາກເຮົາຫວະ? ດື່ມເບຍຈອກນັ້ນຫມົດແລ້ວ ຂ້າພະເຈົ້າກໍກອດເອົາຢາສູບກອກສຸດທ້າຍອອກມາ.

- ເຈົ້າອະນຸຍາດໃຫ້ຂ້ອຍຕໍ່ຍກັບໄຟໃຫ້ບໍ່ລະ? - ພານນິກຄົນນັ້ນເວົ້າແລ້ວຟ້າວຍວາງກັບໄຟມາໃສ່ຫນ້າຂອງຂ້າພະເຈົ້າ.

ຂ້າພະເຈົ້າຮູ້ວິທີການອັນສະຫລາດສ່ອງໃສດ້ວຍການໃຊ້ລູກກັບຂີດເບື່ອງເບິ່ງຫນ້າຜູ້ທີ່ຕົນສົງໄສນັ້ນມາດົນແລ້ວ, ກໍຍ້ອນແນວນັ້ນ ຂ້າພະເຈົ້າຈຶ່ງເປົ່າໄຟນັ້ນໃຫ້ມອດລົງໄປດ້ວຍຄວາມໂມໂຫແລ້ວຈົກເອົາກັບຂີດຂອງຕົນອອກມາຈູດຢາສູບ, ພ້ອມທັງພົ່ນຄວັນໃສ່ຫນ້າຂອງພານນິກຄົນນັ້ນ.

- ຂ້ອຍບໍ່ຄຶດໃຫ້ເຈົ້າຍ້ອນດອກ, - ຫມໍເວົ້າແບບກ່ອມຕົວພາຍຫລັງທີ່ສະຫມັກຍ້ອນຄວັນຢານັ້ນ. - ມີຫລາຍຄົນມັກກຸ້ມຕົນເອງແມ້ກະທັ້ງແຕ່ການສູບຢາ. ຂໍໂທດ, ແຕ່ຢ່າງໃດກໍຕາມຂ້ອຍແລະເຈົ້າເຄີຍໄດ້ພົບກັນມາແລ້ວ. ຈັ່ງໃດເຈົ້າຄືມານິດແທ້? ມື້ນີ້ ຂ້ອຍມີວາດສະຫນາໄດ້ພົບກັບເຈົ້າຢູ່ໃນປ່າ. ຫລືບໍ່ກໍແມ່ນກ່ອນຫນ້ານີ້ມາແລ້ວແມ່ນບໍ່? ເອີ, ແມ່ນແລ້ວ!... ຂໍເຈົ້າຈົ່ງອະໄພ... ຂ້ອຍເດົາເຈົ້າຢູ່ໃນຮ້ານຂາຍຢາມື້ນັ້ນ... ໂທເອີຍ, ເຈົ້າຄືຈັ່ງວ່າເປັນຄົນເລີກລັບແທ້ເວີຍ!

ເປກີ ເອົາເບຍມາ. ພານນິກຍົກຈອກຂຶ້ນ.

- ຈັ່ງໃດກໍຂໍໃຫ້ເຈົ້າອະນຸຍາດໃຫ້ຂ້ອຍໄດ້ດື່ມຫມົດຈອກເພື່ອສຸຂະພາບຂອງເຈົ້າ .

ຂ້າພະເຈົ້າບໍ່ຕອບຄວາມເວົ້າທີ່ມັນໃບ້ຢູ່ບໍ່ເຊົານັ້ນພໍຄຳເລີຍ . ຂ້າພະເຈົ້າຄຶດນຳສິ່ງທີ່ລຸງຂອງຂ້າພະເຈົ້າຫາກໍເວົ້າຫວ່າງຢ່ານີ້. ຄວາມເວົ້າຕ່າງໆເຫລົ່ານັ້ນພາໃຫ້ຂ້າພະເຈົ້າແນ່ໃຈວ່າ ພໍ່ຂອງຂ້າພະເຈົ້າບໍ່ມີຊີວິດຢູ່ອີກແລ້ວ . ຂ້າພະເຈົ້າສືບຕໍ່ພົ່ນຄວັນຢາໃສ່ດັງຂອງຄົນໃກ້ຄຽງຜູ້ບໍ່ເອີ້ນກໍຂານບໍ່ວານກໍຕອບນີ້, ແຕ່ບັກຄົນອັບປີຜູ້ນີ້ກໍຄືເຮັດຫນ້າເຫລື້ອມຢູ່.

- ຫວ່າງນີ້ ມວນມະນຸດຢູ່ ແອຊູໂອເຣີ ແລະບໍລິເວນອ້ອມແອ້ມນີ້ຈັ່ງແມ່ນແປກໄປ, ຫມໍພຶມພຳແລ້ວດື່ມເບຍລົງອຶກໆ. - ຄວາມສຸພາບຂອງເຂົາເຈົ້າແຕ່ກ່ອນຫາຍໄປໃສຫມົດກໍບໍ່ຈັກ? ບໍ່ຄ່ອຍຈະໄດ້ຍິນເຂົາເຈົ້າເອີ້ນກັນດ້ວຍຄວາມວ່າ "ທ່ານ". ຂະຫນາດວ່າເຊີນຄົນຜູ້ທີ່ເຮົາມີຄວາມຊື່ນຊົມໃນຕົວເຂົາດື່ມເບຍ, ແຕ່ເຂົາຊ້ຳພົ່ນຄວັນຢາໃສ່ດັງເຮົາອີກ. ຂ້ອຍຂໍສາລະພາບວ່າສາເຫດນີ້ເນື່ອງມາຈາກພົນສະທ້ອນຂອງກົ່ນອາຍບູດເນົ່າອັນເລີກລັບ ເຊິ່ງມັນພວມແຜ່ລາມໄປໃນບັນຍາກາດແລະພວມເບື່ອເມົາພວກເຮົາຢູ່. ຈັ່ງໃດ? ເຈົ້າບໍ່ຈັກຫວະ? ເຮັດຕີ່ຊື່ງ ຕີ... ບໍ່ວ່າຕີວ່າເຈົ້າຈະບໍ່ໄດ້ຍິນເຂົາເວົ້າກັນເຖິງເລື່ອງທີ່ເກີດຂື້ນກັບພະຄູອີແອເຣມີອາທີ່ເຄົາລົບນັ້ນ? ເຈົ້າບໍ່ຮູ້ຈັກເລື່ອງຄົນໄຂ້ຂອງທ່ານຫມໍຟລົດແດ່ຫວະ? ບໍ່, ຄັນຊັ້ນມັນກໍເປັນເລື່ອງແປກລະ. ບໍ່ວ່າຕີວ່າເຈົ້າຊິຕົກລົງມາແຕ່ຫນ່ວຍພະຈັນພຸ້ນ?

ຂ້າພະເຈົ້າຄ່ອຍໆຍ່ອງສົ້ນກອກຢາໃຫ້ມອດແລະໃຊ້ກຳປັ້ນເຂາະໂຕະຄ່ອຍໆ, ຂ້າພະເຈົ້າເອ່ນຕົວໄປຫາພານນິກຄົນນັ້ນ.

- ແມ່ນແລ້ວ. ຂ້ອຍຕົກລົງມາແຕ່ຫນ່ວຍພະຈັນພຸ້ນ, ແຕ່ຈອກຫນ່ວຍນີ້ຊ້ຳອາດຈະຕົກລົງໃສ່ຫົວຂອງເຈົ້າ. ຂ້ອຍຫາກໍຊິປາກເປັນເທື່ອທຳອິດ, ແຕ່ຈັ່ງຈື່ເອົາໄວ້ຕະຫລອດໄປວ່າຂ້ອຍຫູຫນວກແລະປາກກືກມາແຕ່ຄາວລອດອອກມາຈາກທ້ອງແມ່ພຸ້ນ. ດ້ວຍເຫດນັ້ນ ບັນດາສຳນວນຄວາມເວົ້າອັນລວດລາຍຂອງເຈົ້າ ຈຶ່ງເປັນພຽງຢາດນ້ຳຝົນທີ່ຕົກລົງໃສ່ໄຟກອງຮ້າເທົ່ານັ້ນ. ມັນຈະຫາຍວັບໄປຢ່າງສັບພະລັນ. ຫວັງວ່າເຈົ້າກໍຈະຫລີກໄປຈາກຫົນທາງທີ່ຂ້ອຍພວມເດີນຢູ່ນີ້.

ຂະນະທີ່ຍ່າງຜ່ານເຮືອນຄົວໄປຍັງຫ້ອງຂອງດິນຢູ່ໃນສາງນັ້ນ, ຂ້າພະເຈົ້າໄດ້ບອກນາງນ້ອຍແກ້ດເຊິ່ງຂະນະນັ້ນພວມກົ້ມບ່ວງໃສ່ຊາມໄມ້ດັງແຄລັງຢູ່:

- ນີ້, ຫນູຊີງ, ປຸກອາວແດ່ເດີກໆແດ່ເດີ.

- ອາວ, ຈົ່ງເຢັນໃຈໂລດ. ຂໍໃຫ້ອາວນອນຫລັບຝັນດີ.

ຂ້າພະເຈົ້າຢືນດັກຟັງຢູ່ຂ້າງປະຕູເຂົ້າຫັ້ນຢ່າງລະມັດລະວັງ, ຂ້າພະເຈົ້າກັ້ນໃຈໄວ້ຄືກັບຄົນຜູ້ທີ່ພວມຖືກຕິດຕາມເຄີຍປະຕິບັດກັນ. ແມ່ນແລ້ວ, ຫມໍພານນິກຄືນນີ້ໄດ້ປຸກປັ່ນຄວາມຊິນເຄີຍເກົ່າຂອງຄົນທີ່ບໍ່ມີຫົວຕີນປາຍນອນໃຫ້ຕື່ນຂຶ້ນມາໃນຕົວຂອງຂ້າພະເຈົ້າອີກຄັ້ງຫນຶ່ງ.

ແຕ່ຢູ່ໃນເດີ່ນບ້ານຂອງທ່ານ ບຣິດ ກໍຄົງມີດາງບຢູ່ຕາມເຄີຍ.

## VIII

ຕັ້ງແຕ່ຄາວທີ່ຂ້າພະເຈົ້າຍັງນ້ອຍຈົນມາເຖິງດຽວນີ້, ຖະຫນົນຄົງ ເຊິ່ງເປັນຖະຫນົນໃຈກາງເມືອງແຫ່ງ ແອສໂອເຣີ ນີ້ ກໍຍັງບໍ່ມີຫຍັງປ່ຽນແປງເລີຍ. ຄົງເປັນພາບລວມສັບພະສິ່ງສິສົນແບບເກົ່າຂອງບັນດາຮ້ານຊັກເຄື່ອງ, ຮ້ານເຂົ້າຈີ່ແລະຮ້ານຂາຍເຄື່ອງຍ່ອຍເກົ່າແກ່ຕ່າງໆ ພ້ອມດ້ວຍຝາງຕູ້ແກ້ວທີ່ເຕັມແຕ່ຂີ້ຝຸ່ນ, ຄົງແມ່ນພາບຂອງພວກພໍ່ຄ້າຊາວຂາຍນັ່ງຫາວນ້ອຍຫາວໃຫຍ່ ແລະພວກເຈົ້າຂອງຮ້ານທີ່ຕຸ້ຍຫມຸດລຸດນຸ່ງເສື້ອກັກກຳມະຍີ່ນັ້ນແລ້ວ.

ຂ້າພະເຈົ້າຍ່າງໄປຕາມແຜ່ນຫີນທີ່ປູຢາຍຢູ່ຕາມຂອກຖະຫນົນທີ່ຄຸ້ນເຄີຍສາຍຫນຶ່ງ, ແລະດວງອາທິດອັນອົບອຸ່ນນັ້ນ ກໍພວມຍິ້ມຫົວກັບຂ້າພະເຈົ້າຢູ່. ຂ້າພະເຈົ້າເກີດຄວາມເສົ້າໃຈຂຶ້ນມາຢ່າງບອກບໍ່ຖືກເມື່ອຂ້າພະເຈົ້າຍ່າງຕີນເຂົ້າໄປໃນສວນສາທາລະນະ.

ຫັ້ນເດ ຕັ່ງມ້ານ້ອຍຫນ່ວຍເຊິ່ງຂ້າພະເຈົ້ານັ່ງນຳກັນກັບເອດີ ກ່ອນນີ້ສາມປີ. ໃນຫນານດອກໄມ້ນັ້ນ ຄົນສວນກໍຍັງປູກໄວ້ເຊັ່ນເດີມ. ແນມຜ່ານຈາກຕັ່ງຫນ່ວຍນີ້ໄປແມ່ນຮ້ານຂາຍນ້ຳຫມາກໄມ້ແຫ່ງຫນຶ່ງ, ປະກົດວ່າຜູ້ຂາຍຢູ່ນັ້ນເປັນຄົນທີ່ຂ້າພະເຈົ້າລຶ້ງເຄີຍດີ. ຂ້າພະເຈົ້າຫຍັບເຂົ້າໃກ້ກ່ວາເກົ່າ. ຊາຍຫນຸ່ມຫນ້າແດງອົ່ງຕົ່ງຄົນຫນຶ່ງນຸ່ງເຄື່ອງຊຸດໃຫມ່ອ່ຽມຫລິມໂຕ່ງເລ່ງຢືນຢູ່ຂ້າງຮ້ານແລະພວມຕົ້ນນາງສາວຜູ້ເຊິ່ງພວມກອກນ້ຳຫວານຂາຍ. ຕົ້ນຜົມກູດໆເປັນຍອຍຢູ່ແນບຫູສອງກ້ຳຂອງຍິງສາວນັ້ນເຮັດໃຫ້ຊວງເອິກຂອງຂ້າພະເຈົ້າຕຶບຕັນເຂົ້າ. ຄໍເສື້ອຂາວທີ່ເປັນໃບເປີດອອກຮຽບຮ້ອຍຢູ່ເທິງບ່າຈ່ອຍທັງຄູ່ແລະທຸກໆກິລິຍາອາການເທິງມືນ້ອຍໆ ທັງຄູ່ຂອງນາງນັ້ນໄດ້ເຮັດໃຫ້ຄໍເສື້ອຂອງນາງເຫນັງຕຶງວັບໆ.

- ນີ, ນ້ອງ ວິນເທ, ຖ້າມີນ້ອງຂີ່ເຮືອຊ່ວງໄປນຳອ້າຍກໍຄືຊິດີກະຫນາດເລີຍ! ພວກເຮົາຈະໄປຈົນເຖິງແຫລມເດີຍັງ ແລະຍ່າງກິນອາກາດຢູ່ແຄມທະເລດົງ. - ຊາຍຫນຸ່ມຄົນນັ້ນເວົ້າຄ່ອຍໆແລະເສືອດຕາແນມເບິ່ງຍິງສາວ.

ແນ່ນອນວ່າ, ນາງຄົນນັ້ນຄື ເອດີ, ຂ້າພະເຈົ້າຈື່ນາງໄດ້ກ່ອນທີ່ບໍ່ທັນໄດ້ແນມເຫັນຮອດດວງຕາທີ່ຫນ້າຮັກຂອງນາງ, ດວງຕາເຊິ່ງຂ້າພະເຈົ້າບໍ່ອາດຈະລືມລົງໄດ້ໃນຊົ່ວຊີວິດ, ແມ້ແຕ່ຍາມທີ່ພວມຕົກຢູ່ໃນປາກພະຍາມັດຈຸລາດຕອນທີ່ກຳປັ່ນ "ບຸກຊຸກ" ຈົມລົງນ້ຳ ແລະໃນຂະນະທີ່ຂັນນ້ຳພວມບິດເອົາຂ້າພະເຈົ້າລົງສູ່ເຫວເລິກແຫ່ງມະຫາສະຫມຸດພຸ້ນ.

ຂ້າພະເຈົ້າບໍ່ໄດ້ຍິນ ເອດີ ຕອບຫຍັງເລີຍ. ແຕ່ສະເພາະຂ້າພະເຈົ້າແລ້ວ, ກ່ອນອື່ນຫມົດແມ່ນຕ້ອງໄປຫາບ່າວຄົນນັ້ນ ແລະເວົ້າກັບເຂົາດ້ວຍຄວາມຮັກແພງຍິ່ງວ່າ:

- ບິບ, ໂຕຟັງພີ້ກ່ອນ. ເຮືອຊ່ວງຂອງໂຕສະຫມໍ່ມັນຫລຸດ. ພວກເດັກນ້ອຍພວມຊອກຫາໂຕຢູ່ທົ່ວແອຊູໂອເອີ. ຟ້າວໄປເທາະແມ້, ຈັກຫນ່ອຍ ມັນຊິຕຳຫີນແຕກກຸ້ມລ້າງແລ້ວ...

ບິບ ແບັກໂອເອີ ແນມເບິ່ງຂ້າພະເຈົ້າດ້ວຍຄວາມຕົກໃຈ ແລ້ວແລ່ນລີ້ວໄປຕາມທ້ອງກະຫນົນລົງສູ່ທ່າກຳປັ່ນ.

- ນ້ອງ ວິນເທ, ຂໍໂທດນຳນ້ອງຫລາຍໆ, - ຂ້າພະເຈົ້າກ່າວພືມພຳສີໄວໆແລ້ວຫັນຫລັງຫນີໄປ.

ຂ້າພະເຈົ້າຫນີໄປແລ້ວ ແຕ່ຍັງປະກົດຄືຈັ່ງວ່າ ເອດີ ໄດ້ແນມນຳຂ້າພະເຈົ້າຢ່າງຈັບຈ້ອງແລະເປັນຫ່ວງກັງວົນ. ຂ້າພະເຈົ້າຢາກອ່ວາຍຫນ້າຄືນມາທີ່ສຸດ, ແຕ່ຂ້າພະເຈົ້າບໍ່ສາມາດເຮັດແບບນັ້ນໄດ້. ເອດີ ຈື່ຂ້າພະເຈົ້າບໍ່ໄດ້ ແລະບໍ່ສາມາດຈະຈື່ໄດ້ອີກ ເພາະໃບຫນ້າຂອງຂ້າພະເຈົ້າມັນບໍ່ແມ່ນຫນ້າຂອງ ເຊມຸຍແອນ ບີນ ອີກແລ້ວ. ແຕ່ນາງນັ້ນ ພວມເປັນຫ່ວງ, ແນ່ນອນແລ້ວວ່າ, ນາງເປັນຫ່ວງນຳ ບິບ ແບັກໂອເອີ...

ຄາວຍັງນ້ອຍ, ທຸກເທື່ອທີ່ມີຄວາມເຈັບຊ້ຳ ແລະອຸກໃຈຍ້ອນເລື່ອງໃດເລື່ອງຫນຶ່ງ, ຂ້າພະເຈົ້າມັກຈະໄປໃຫ້ແມ່ອົ່ນອອຍ. ຂ້າພະເຈົ້າແລ່ນໄປແນະຂ້າງແມ່, ແລ້ວເລົ່າໃຫ້ແມ່ຮູ້ເຖິງຄວາມອາພັບອັບເສົ້າຂອງຕົນ, ແລະແມ່ກໍຈະຊອກຫາຄຳເລົ້າໂລມອັນສຸດຊຶ້ງບົ່ມລົ້ນໄປດ້ວຍຄວາມກະນຸກະຫນອມແລະສົງສານຂອງຜູ້ເປັນແມ່ ເພື່ອມາອົບອຸ່ນໃຈຂອງຂ້າພະເຈົ້າ. ແລະໃນຂະນະ

ນີ້ກໍເຊັ່ນດຽວກັນ ຫມາກຫົວໃຈຂອງຂ້າພະເຈົ້າພວມລຸກໄຫມ້ຢູ່ດ້ວຍຄວາມຫິວໂຫຍທີ່ຢາກຈະໄປຄາລະວະກອງພອນຂອງພໍ່ແມ່ ເພື່ອຈະໄດ້ຜ່ອນຄາຍຈິດໃຈທີ່ພວມວຸ້ນວາຍຂອງຕົນໃຫ້ມັນຫລຸດຜ່ອນລົງໄປສ່ວນໃດສ່ວນຫນຶ່ງ.

ປ່າຊ້າຂອງເມືອງ ແອຊູໂອເອີ ໄດ້ກວມເອົາເນື້ອທີ່ສ່ວນຫນຶ່ງຂອງສວນສາທາລະນະ ທາງກໍ້າຕາຝັ່ງຊັນ. ຢູ່ເບື້ອງລຸ່ມພຸ້ນ ຄື້ນທະເລແລ່ນໄລ່ກັນກຸ້ມເຂົ້າໃສ່ມວນຫມູ່ໂຫງ່ນຫີນຕ່າງໆເຫລົ່ານັ້ນ ຂ້າພະເຈົ້າລັດຜ່ານປ້ອມຍາມ, ຜ່ານໂບດເກົ່າແກ່ທີ່ງົບສະຫງັດເຊິ່ງສ້າງດ້ວຍຫີນອ່ອນສີຂີ້ເທົ່າແລະມີຫມູ່ເຄືອເຂົາບົ່ງຄຸມຢູ່ທາງນອກ ຕະຫລອດເວລາ, ຜ່ານບັນດາຫລັກໄມ້ກາງເຂນທີ່ເຄັ່ງຂຶມ, ໂສກເສົ້າຢູ່ໃຕ້ພຸ່ມດອກໄມ້ແລະພຸ່ມໄມ້ຄຸມເຄືອນັ້ນໄປຄືບ່ອນສະຫງົບອາລົມໃນຊົ່ວນິດນິລັນຂອງພໍ່ແມ່ຂ້າພະເຈົ້າຊຶ່ງຕັ້ງຢູ່ລະຫວ່າງກາງຮົ່ມແປກສອງຕົ້ນ ທີ່ຢືນຄ້ຳນັ້ງຢູ່ນັ້ນ, ແລະຫ່າງຈາກຕາຝັ່ງປະມານສິບຫລາ.

ເມື່ອໄປເຖິງຂຸມຝັງສົບນັ້ນແລ້ວ, ຂ້າພະເຈົ້າກໍປົດຫມວກອອກດ້ວຍຄວາມຢຳເກງແລະຄູ້ເຂົ່າລົງ. ຢາດນ້ຳຕາໄຫລພັງອອກມາບົດບັງຫນ່ວຍຕາທັງຄູ່, ຂ້າພະເຈົ້າຈົ່ມພຶມພຳອອກມາວ່າ:

- ພໍ່ແລະແມ່ທີ່ແສນຮັກອາໄລຂອງລູກ! ພໍ່ແລະແມ່ໄດ້ມອບຊີວິດໃຫ້ແກ່ລູກ ... ກ້າແມ່ນຂະນະນີ້ພໍ່ແລະແມ່ຫາກສາມາດແນມເຫັນຫນ້າລູກຂອງຕົນໄດ້ແລ້ວ! ລູກກໍ ...

ຄວາມເຈັບຊ້ຳກຸ້ມກ້ອນຫົວໃຈຂອງຂ້າພະເຈົ້າ, ແລ້ວຂ້າພະເຈົ້າກໍໄຫ້ຂຶ້ນ, ຢ່າງບໍ່ອັບອາຍ ຢາດນ້ຳຕາທີ່ຮ້ອນຜ່າວໄປດ້ວຍຄວາມອາໄລຮັກແລະເສົ້າສະຫລົດໃຈຍິ່ງ.

ຂ້າພະເຈົ້າອ່ານປ້າຍທີ່ຕິດຢູ່ເບື້ອງເທິງຂອງພວງມາລາເຊິ່ງວາງໄວ້ຢູ່ທີ່ເສົາໄມ້ກາງເຂນນັ້ນຜ່ານຢາດນ້ຳຕາ. ປ້າຍດັ່ງກ່າວຂຽນຂຶ້ນແບບງ່າຍໆວ່າ:

"ອານນາ ມາຣີອາ ປິນ.

໑໘໔ ...

ສາມີແລະບຸດຕາ ເສົ້າອາໄລຈວນຈະຂາດໃຈ

ຂໍຂາບໄຫວ້ດ້ວຍຄວາມອາວອນຍິ່ງ

ເຖິງພັນລະຍາ ແລະມານດາຜູ້ສຸຂຸມອ່ອນນ້ອມ.

ຈະບໍ່ຂໍລືມຊົ່ວນິລັນດອນ".

"ອາຍີດໍ ເດໂອພົນ ບີນ.

໑ເລອ...

ໃນວັນປະຫານໂທດ, ຂໍພະຜູ້ເປັນເຈົ້າ ຢ່າໄດ້ປະຫານກຳຕາມກຳມະວິບາກທີ່ຂ້າໄດ້ກະທຳມາ.

ຂໍພະອົງຈົ່ງຊົງປະຫານພົນກຳຕາມ ບາລະມາທິຄຸນຂອງພະຜູ້ເປັນເຈົ້າຕໍ່ຂ້າເທີດ".

ຂ້າພະເຈົ້າກົ້ມຫົວລົງເລົ່າເລື່ອງລາວຕ່າງໆກ່ຽວກັບການຊຸດເຊພະເນຈອນ, ພະຈີນໄພແລະອັບໂຊກຂອງຕົນຄືນ, ເຫມືອນກັບວ່າຢາກໃຫ້ແມ່ຂອງຂ້າພະເຈົ້າໄດ້ຍິນນຳ.

ທັນໃດນັ້ນ, ຫ່າງຈາກຂ້າພະເຈົ້າບໍ່ໄກພໍເທົ່າໃດ, ກໍມີສຽງກິ່ວສອນສຽງນົກຮ້ອງດັງຂຶ້ນຄ່ອຍໆຈາກພຸ່ມດອກກຸຫລາບບ່ອນໃດບ່ອນຫນຶ່ງ. ສຳລັບຂ້າພະເຈົ້າແລ້ວ, ສຽງກິ່ວແບບນີ້ຢູ່ໃນປ່າຊ້າມັນເປັນເລື່ອງບໍ່ຖືກກາລະເທສະຈັກດີເລີຍ. ຂ້າພະເຈົ້າຽວກໄປເບິ່ງ.

ຫມໍນາຍພານນົກພວມຍ່າງໄປຕາມເສັ້ນທາງ, ເຂົານຸ່ງເຄື່ອງອັນຈົບງາມ, ຂອງນາຍພານຢ່າງຄົບຊຸດ: ພາຍກ້ອງສ່ອງຢູ່ເບື້ອງຂວາ, ສ່ວນທີ່ພາຍຢູ່ບ່າອີກເບື້ອງຫນຶ່ງນັ້ນ ແມ່ນກະຕິກໃສ່ນ້ຳຫນ່ວຍທີ່ຂ້າພະເຈົ້າຂາຍໃຫ້ບຣິດໃນມື້ວານນີ້.

ມັນຕັ້ງແມ່ນຫມໍນີ້ເອງທີ່ກິ່ວແລ້ວກໍທຳທ່າເງີຍຫນ້າແນມເບິ່ງປາຍໄມ້.

"ບະ, ຫາກບັກຈອງຫອງນັ້ນຫາກຫມົ້ນເຂົ້າມາຫາຂ້າພະເຈົ້າອີກເທື່ອນີ້ ກໍຈະໄດ້ເຫັນດີກັນແຫລະ!" ຂ້າພະເຈົ້າຢືນຂຶ້ນແລະກຳກຳປັ້ນເຂົ້າ. ເວົ້າແທ້ແລ້ວເລືອດຈອງຫອງຂອງມັນຍັງບໍ່ທັນເຫືອດແຫ້ງເທື່ອ. ຫມໍຢືນຢູ່ຫ່າງຂ້າພະເຈົ້າປະມານສອງກ້າວ, ເຂົາວາສອງແຂນອອກກ້ວາງໆຄືກັບຢາກຈະກອດໂອບເອົາເພື່ອນຜູ້ທີ່ຫາຍຫນ້າຫາຍຕາໄປຕັ້ງດົນນານ ແລ້ວໄດ້ກັບມາພົບກັນອີກເທື່ອໃຫມ່.

- ເຈົ້າເອງຫວະຫັ້ນ? - ເຂົາຮ້ອງຂຶ້ນ. - ເຊື່ອແນ່ວ່າແມ່ນເຈົ້າອີຫລີ! ຂ້ອຍເຊື່ອຫມັ້ນວ່າຈັ່ງໃດກໍຈະໄດ້ພົບເຈົ້າຢູ່ນີ້. ບາດນີ້ບໍ່ຕ້ອງສົງໄສອີກແລ້ວວ່າ...

ຮູບຮ່າງທີ່ເປັນຕາຢາກຫົວຂອງຫມໍນາຍພານນົກປະກົດຕົວຂຶ້ນມາໃນເງົາທ້ອງຟ້າລະດູບານໃຫມ່ຢູ່ເທິງຫນ້ານ້ຳສີຄາມຂອງມະຫາສະຫມຸດທີ່ກວ້າງໄກໄພສານ ເບິ່ງແລ້ວມັນເລືອນລາງຄື



20*

ກັບຕັດອອກມາຈາກໃບເຈ້ຍ. ໂອບັກຈອງຫອງນີ້, ມັນຈະກາຍເປັນຫມອກຄ້ວນໄປກ້າຂ້າພະເຈົ້າຫາກບັງຄັບໃຫ້ມັນສັກຫົວລົງໃສ່ໂງ່ນຫີນເບື້ອງລຸ່ມພຸ້ນ!

ຂ້າພະເຈົ້າແຜດສຽງອອກມາ:

- ບໍ່ຕ້ອງສົງໄສອີກວ່າມຶງແມ່ນບັກອັນຕະພານສັນດານຊົ່ວ! ມຶງສະກົດຮອຍຕິດຕາມກູມາ. ແຕ່ກູຊ້ຳເຄີຍປ່ອງບ້າ...

ແລ້ວຂ້າພະເຈົ້າກໍຍົກກຳປັ້ນຂຶ້ນວ່າຈະຊັດມັນ.

- ຟ້າວກ່ອນ! - ຫມໍນາຍພານນົກ ຮ້ອງຂຶ້ນ. - ຟ້າວກ່ອນ ເຊມຸຍແອນ ບີນ!

- ກູບໍ່ເຄີຍເປັນ ເຊມຸຍແອນ ບີນ ຈັກເທື່ອ! - ຂ້າພະເຈົ້າກັດແຂ້ວກາດງຂຶ້ນດ້ວຍຄວາມປ່ອງບ້າ. - ມຶງຫລົງຄົນແລ້ວ...

ຫມໍນາຍພານນົກ ກອດມືໄຂ່ວເອິກດ້ວຍຄວາມໄຫວ້ວອນ.

- ບີນ, ເຈົ້າເຊື່ອເທາະວ່າ ເຈົ້າເອງຕ່າງຫາກທີ່ເປັນຜູ້ຫລົງ. ພຸດໂທເອີຍ, ເຈົ້າຄືຊິຈື່ຂ້ອຍບໍ່ໄດ້... ເຈົ້າຈົ່ງທວນຄຶດເຖິງທ່ານສາດສະດາຈານ ທີ່ ມາຊາດລານ ເບິ່ງ!

ຂ້າພະເຈົ້າຍ່າງກອຍຫລັງ ດ້ວຍຄວາມກະວົນກະວາຍ.

- ຈັ່ງໃດ? ເຈົ້າແມ່ນ ໂຣນເຊີ ຊັ້ນຫວະ?

ແຕ່ຫມໍນາຍພານນົກແກວ່ງຫົວດ້ວຍຄວາມເຈັບຊ້ຳ.

- ບໍ່, ຂ້ອຍແມ່ນ ວານດິກ...

## ຕອນທີສິບເອັດ

### I

ຂໍໂທດນຳທ່ານຜູ້ອ່ານປຶ້ມຫລັງນີ້ ເພາະຂ້າພະເຈົ້າຈະເວົ້າອອກນອກເລື່ອງແດ່ເລັກນ້ອຍ. ຂ້າພະເຈົ້າບໍ່ອາດທີ່ຈະບໍ່ເລົ່າເຖິງບັນດາເຫດການທີ່ແປກປະຫລາດ ເຊິ່ງເກີດຂຶ້ນທີ່ແອຊູໂອເຣີໃນໄລຍະນັ້ນ. ຂ້າພະເຈົ້າເກັບກຳເຫດການດັ່ງກ່າວເຫລົ່ານັ້ນໄດ້ຈາກຄຳບອກເລົ່າຂອງບຸກຄົນຕ່າງໆ, ມີຫລາຍຄົນທີ່ເຫັນປະຈັກຕາໄດ້ໃຫ້ການຢືນຢັນເຫດການເຫລົ່ານັ້ນ, ແລະເຂົາເຈົ້າກໍບໍ່ມີເຫດຜົນເພື່ອຈະໄປສົງໄສຄຳຢັ້ງຢືນອັນຖືກຕ້ອງຂອງເຫດການຕ່າງໆນັ້ນ.

ບາງທີ ບົດບັນທຶກກ່ຽວກັບພະຍາດບາດເຈັບຕ່າງໆໃນໂຮງໝໍອາດເປັນວັນນະຄະດີປະເພດເປັນຕາເບື່ອທີ່ສຸດ. ແຕ່ແລ້ວ, ກໍເປັນດັ່ງທີ່ທ່ານໝໍ ຟຣິດ ເຄີຍໄດ້ໃຫ້ຄຳຢັ້ງຢືນມານັ້ນແລ້ວວ່າ, ບັນດາຄຳບັນທຶກຢ່າງເປັນທາງການດ້ວຍບັນດາຕົວອັກສອນອັນເຂັ້ມຂຸ້ນແລະຕ່າງກັນຂອງບັນດາທ່ານໝໍປົວພະຍາດເຊິ່ງມີຂໍ້ບັນທຶກອຸນຫະພູມ, ຮູບຖ່າຍເອັກຊະເລ ແລະບັນດາຂໍ້ວິໃຈຕິດຄັດໄວ້ພ້ອມນັ້ນ. ແມ່ນເອກະສານທີ່ມີຄ່າທີ່ສຸດຂອງມະນຸດ, ດ້ວຍເຫດວ່າບັນດາລະຄອນທີ່ມີທັງໂສກ ແລະຕະລົກຂອງຊີວິດປະຈຳວັນໄດ້ຖືກສ່ອງແສງອອກມາຢ່າງພາວະວິໄສທີ່ສຸດໃນບ່ອນນີ້ ເປັນຄວາມຈິງທີ່ວ່າ, ທ່ານ ແຟຣັດເຊີນ, ຫົວໜ້າຫ້ອງການສາລະວັດແຫ່ງ ແອຊູໂອເຣີກໍມີຄວາມເຫັນແບບດຽວກັນນັ້ນ ຕໍ່ບັນດາສຳນວນສອບສວນຜູ້ຕ້ອງໂທດ, ສ່ວນຂຸນສານ ເຊີຍເຕີນ ກໍມີທັດສະນະແບບນັ້ນເຊັ່ນກັນຕໍ່ພິໄນກຳຂອງຜູ້ທີ່ຕາຍໄປແລ້ວ. ແຕ່ປະກົດວ່າທ່ານໝໍເວົ້າຖືກກວ່າເພິ່ນ. ເພິ່ນເຄີຍໄດ້ໃຫ້ຄວາມເຫັນວ່າ ມີຫລາຍເທື່ອທີ່ເຂົາເຈົ້າໄດ້ຄົ້ນພົບຢູ່ໃນຂອບເຂດຂອງການແພດກ່ຽວກັບລັກສະນະແປກປະຫລາດທີ່ສຸດ ຊຶ່ງລັກສະນະດັ່ງກ່າວບໍ່ຜິດຫຍັງກັບລັກສະນະຄວາມເປັນຈິງຂອງກໍລະນີດັ່ງກ່າວ.

ເຊົ້າມື້ໜຶ່ງຂອງເດືອນພຶດສະພາ ອາກາດສົດຊື່ນແຈ່ມໃສເປັນພິເສດ, ທ່ານໝໍ ຟຣິດ ນັ່ງຢູ່ໃນຮ້ານຂາຍຢາຂອງທ່ານ ອິກພີ. ທ່ານໝໍແວະມາແຫ່ງນີ້ ເພື່ອຮັບເອົາເງິນທີ່ເຂົາເຈົ້າຈ່າຍຄ່າຢາປົວພະຍາດຫົວໃຈຝືດຂອງເພິ່ນ. ແອເດີ ຫາກໍໄຂແກ້ວນ້ຳ ໂຊດາ ເພື່ອລັ່ງສະຫລອງແນວຮັບການຄ້ານ້ອຍໆນັ້ນ, ໃນຂະນະນັ້ນ ສາວໃຊ້ຂອງທ່ານຜູ້ພິພາກສາກໍແລ່ນຫລູບເຂົ້າມາໃນຮ້ານປານກະແສລົມພະຍຸພັດລ່ວງແລະແຈ້ງຂ່າວວ່າ ຊໍາຫລວງຜູ້ທີ່ເຄົາລົບນັບຖືຄວາມຍຸຕິທຳ ພວມຕ້ອງການການຊ່ວຍອັນຮີບດ່ວນຈາກແພດ. ສາວໃຊ້ເລັ່ງລັດໃຫ້ທ່ານໝໍໄປດ່ວນ ແລະນາງກໍບໍ່ສາມາດຈະເລົ່າລະອຽດລະອໍເຖິງອາການເຈັບຂອງເຈົ້ານາຍໄດ້ເລີຍ.

ຫລັງຈາກນັ້ນປະມານສອງນາທີ ທ່ານໝໍຟຣິດກໍໄດ້ຍ່າງໄປຕາມເສັ້ນທາງມຸ່ງໜ້າສູ່ເຮືອນຂອງທ່ານ ຜູ້ພິພາກສາຢ່າງສະຫງ່າຜ່າເຜີຍ. ເພິ່ນກຶ່ທີບນ້ອຍໜ່ວຍໜຶ່ງເຊິ່ງທາງໃນບັນຈຸເຄື່ອງມືຕ່າງໆໄປນຳແລະຄິດ, ບໍ່ຈັກວ່າທຳມະຊາດພິເວນນີ້ ຈະໃຫ້ຂອງຕ້ອນບັງເອີນແບບໃດແກ່ເພິ່ນ ເຊິ່ງເພິ່ນຈະຕ້ອງແກ້ໄຂຫນ້າທີ່ວິໃຈພະຍາດນັ້ນແບບໃດໃນເວລາຕໍ່ມາ. ສາວໃຊ້ຂີ້ໂງ່ນັ້ນ ຂະນະທີ່ຍ່າງຮຽງທ່ານໝໍໄປ ນາງໄດ້ເວົ້າໄຫລລຸດໆອອກມາດ້ວຍຄວາມໄວສາມຮ້ອຍ

ຄວາມດີວິນາທີ, ສ່ວນທ່ານຫມໍນັ້ນສາມາດເກັບກຳຂໍ້ໃຫຍ່ໃຈຄວາມໄດ້ພຽງແຕ່ວ່າຕອນເຊົ້າ ທ່ານຜູ້ພິພາກສາໄປຫ້ອງການເທດສະບານ, ແລະເພິ່ນກໍຟ້າວກັບຄືນມາໂລດ. ເມື່ອເຂົ້າມາເຖິງໃນເຮືອນເພິ່ນເວົ້ານຳສາວໃຊ້ວ່າ: "ນີ້, ນາງ ລີລີ ໃຈດີເອີຍ, ຢ່າໄດ້ແນມເບິ່ງຂ້ອຍເປັນອັນຂາດ." - ເທົ່ານັ້ນ ແລ້ວເພິ່ນກໍເອົາແພມືນບັງຫນ້າແລ້ວແລ່ນຂຶ້ນໄປຍັງຫ້ອງນອນຢູ່ຊັ້ນເທິງພຸ້ນໂລດ. ລີລີ, ຕາມຄຳທີ່ນາງເວົ້າ, ນາງບໍ່ເຄີຍເປັນຄົນສອດຮູ້ສອດເຫັນມາກ່ອນ. ແຕ່ເທື່ອນີ້ ນາງໄປຢືນຢູ່ຂ້າງປະຕູຫ້ອງນອນເພື່ອລໍຄອຍເບິ່ງວ່າເຈົ້ານາຍຈະຕ້ອງການຫຍັງຈາກນາງແດ່. ແລ້ວນາງກໍຄຶດບໍ່ໄດ້ຜິດເລີຍ. ນາງໄດ້ຍິນສຽງແກ້ວແຕກຢູ່ໃນຫ້ອງ ແລະໄດ້ຍິນສຽງທ່ານຜູ້ພິພາກສາແຜດຂຶ້ນ:

- ລີລີ ໄປໃສແລ້ວ, ອີ່ພີເຜດມຶງເອີຍ! ຮີບໄປຫາທ່ານ ພຣິດ, ເປັນຕາຍຈັ່ງໃດກໍຕ້ອງພາລາວມານີ້ກ່ອນ! ເວົ້າກັບເພິ່ນວ່າກູບໍ່ສະບາຍ.

ລັກສະນະໃຈຮ້ອນບໍ່ໄດ້ນອນຢູ່ໃນຈຳນວນຈຸດອ່ອນຂອງທ່ານຫມໍ ພຣິດ ເລີຍ, ກົງກັນຂ້າມທ່ານຫມໍຜູ້ນີ້ຊ້ຳມີນິດໄສ: ຍິ່ງເຂົາເຈົ້າຊຸ້ນຂ້ຽວໃຫ້ຮີບໄປຫາຄົນເຈັບເທົ່າໃດ ເພິ່ນກໍຍິ່ງເຢືອກເຢັນຫລືນວາດຂຶ້ນເທົ່ານັ້ນ.

ແລ້ວຂະນະນີ້, ເມື່ອໄປຮອດເຮືອນຂອງທ່ານຜູ້ພິພາກສາ, ທ່ານຫມໍກໍຫ້າມບາດຕີນໄວ້ເທິງລະບຽງທາງເຂົ້າ, ແລະອ່ານແຖວຕົວອັກສອນທີ່ຄຸ້ນເຄີຍຢູ່ເທິງປ້າຍນັ້ນວ່າ:

"ເວີຍຈະເລີຍ ຜູ້ພິພາກສາສູງສຸດແຫ່ງ ແອສູໂອເຣີ"

ລີລີ ໄຂປະຕູອອກ, ແລ້ວທ່ານຫມໍກໍຍ່າງຜ່ານປາກປະຕູໄປດ້ວຍທ່າທາງອັນເຄັ່ງຂຶມໂສກເສົ້າປະຈຳຕົວຂອງຄົນຜູ້ທີ່ມີຄວາມຮັບຜິດຊອບສຳຄັນໃນຂະນະທີ່ພວມປະຕິບັດຫນ້າທີ່ ເຊິ່ງບໍ່ແມ່ນວ່າຈະນຳເອົາແຕ່ຄວາມສົດຊື່ນມາສູ່ຄົນທີ່ຢູ່ໃນເກມນັ້ນທຸກຄັ້ງຄາວ. ທ່ານຫມໍປົດຫມວກຂອງຕົນອອກຢ່າງງຽບໆ, ໃຊ້ແພມືນເຊັດເຫື່ອຢູ່ເທິງຫົວລ້ານ ແລະແນມເບິ່ງ ລີລີ ຄືຢາກຈະຖາມຄວາມໃດຄວາມຫນຶ່ງ. ລີລີ ພາທາງໄປກ່ອນ ແລະຍ່ອງໄປດ້ວຍປາຍຕີນຢ່າງລະມັດລະວັງໂດຍບໍ່ໄດ້ກະແທກສົ້ນຕີນລົງສູ່ພື້ນເຮືອນຄືທີ່ຜ່ານມາ.

ທ່ານຫມໍຍ່າງຜ່ານຫ້ອງຮັບແຂກໄປ, ແລ້ວກ້າວຂຶ້ນໄປຍັງຊັ້ນສອງ. ຢູ່ລະຫວ່າງກາງບັນດາຕູ້ບັນຈຸປະມວນແລະຕົວບົດກົດຫມາຍຕ່າງໆເຕັມປຶກຢູ່ນັ້ນມີປະຕູໄມ້ດູ່ຕັ້ງຢູ່. ລີລີ ເຂາະປະ

ຕູ. ທ່ານຫມໍເອງກໍເຂາະນຳ. ຂະນະດຽວກັນກໍມີສຽງຂອງທ່ານຜູ້ພິພາກສາ ເວີຍຊະເລີຍ ດັງກ້ອງອອກມາ:

- ຊິເຂາະເຮັດຫຍັງອີກ ທ່ານ ຟຣິດ, ທ່ານເອງກໍຮູ້ດີແລ້ວວ່າມີຄົນຮ້ອນໃຈລໍຖ້າທ່ານຢູ່. ເຂົ້າມາເລີຍທ່ານ, ແລ້ວທ່ານກະລຸນາ ໄລ່ອີ ຊີລີ ນັ້ນລົງເຮືອນໄປໃຫ້ແດ່, ຢ້ານມັນຊິລັກຟັງ. ມັນເຄີຍມີສັນດານແນວນັ້ນ.

ທ່ານຫມໍຍ່າງເຂົ້າຫ້ອງ, ແລ້ວກໍອັດປະຕູຢູ່ທາງຫລັງໄວ້ແຈບໆ. ຫ້ອງນອນຮຸ່ງສະຫວ່າງໄປດ້ວຍແສງໄຟຟ້າແລະທຽນໄຂ, ເຖິງແມ່ນວ່າແສງແດດຈະຫລັ່ງໄຫລເຂົ້າມາທາງປະຕູປ່ອງຢ້ຽມຢ່າງເບີກບານກໍຕາມ. ທ່ານຜູ້ພິພາກສາ ເວີຍຊະເລີຍ ນັ່ງຢູ່ເທິງຕັ່ງອີ້ ແລະຫັນຫລັງມາທາງປະຕູທີ່ທ່ານຫມໍຫາກໍກ້າວເຂົ້າໄປນັ້ນ, ເພິ່ນບໍ່ໄດ້ງວາກຫນ້າມາເລີຍ. ເພິ່ນພວມເພີ່ງສັງເກດເບິ່ງວັດຖຸອັນໃດອັນຫນຶ່ງທີ່ກຳຢູ່ໃນມື.

- ສະບາຍດີ ທ່ານ ເວີຍຊະເລີຍ! - ທ່ານຫມໍເວົ້າດັງໆດ້ວຍສຽງອັນນຸ່ມນວນ ເຊິ່ງເພິ່ນເຄີຍໃຊ້ເພື່ອໃຫ້ຄົນໄຂ້ມີຄວາມຫຸ່ນໃຈແລະມີຫວັງ.

- ສະບາຍດີ ທ່ານຟຣິດ, - ໂດຍບໍ່ຍອມງວາກຫນ້າມາເທື່ອ, ທ່ານຜູ້ພິພາກສາເວົ້າພໍພຸມໆ. - ຂໍທ່ານຢ່າເຂົ້າມາໃກ້ຂ້າພະເຈົ້າ. ກ່ອນອື່ນຫມົດຈົ່ງປິງຫີບຂອງທ່ານລົງກ່ອນ, ແລ້ວນັ່ງລົງຫັ້ນ. ທ່ານຈົ່ງຕຽມຈິດຕຽມໃຈໄວ້ເບິ່ງສະພາບການທີ່ຫນ້າລຳຄານໃຈນີ້. ຂ້າພະເຈົ້າເກງວ່າທ່ານຈະສະຫລົບໄປກ່ອນແລະເຮັດແກ້ວຢຸກແກ້ວຢາຂອງທ່ານແຕກກໍ້ມລ້າ.

- ມັນແມ່ນເລື່ອງຫຍັງລະ? - ທ່ານຫມໍອຸທານຂຶ້ນ, ແຕ່ເພິ່ນກໍຄືວາງຫີບລົງທີ່ຕັ່ງນວມຫນ່ວຍທຳອິດທີ່ເພິ່ນແນມເຫັນນັ້ນໂລດ, ຍ້ອນວ່າເພິ່ນຊິນເຄີຍກັບການປະຕິບັດຕາມຄຳຮຽກຮ້ອງຕ້ອງການຂອງຜູ້ພິພາກສາມາແຕ່ດົນແລ້ວ, ອີກຢ່າງຫນຶ່ງເພິ່ນກໍແພງຊີແລັງສັກຢາທີ່ເປັນມໍລະດົກຕົກທອດມາຈາກພໍ່ຂອງເພິ່ນນັ້ນເປັນຢ່າງຍິ່ງ, ຊຶ່ງຄາວກ່ອນພໍ່ຂອງເພິ່ນກໍໃຊ້ມັນປົວພະຍາດຢູ່ ແອຊູໂອເຮີນີ້ມາແລ້ວ.

- ຢຸດກ່ອນ, ຟຣິດ! - ໂດຍບໍ່ສາມາດອົດກັ້ນໄວ້ໄດ້ອີກ, ທ່ານຜູ້ພິພາກສາຮ້ອງຂຶ້ນ. - ຫ້າມແນມເບິ່ງຂ້ອຍແລະຟັງນີ້. ຈົ່ງລືມຄວາມເວົ້າທີ່ ຊີລີໃບ່ໄປທົ່ວທີບກັບເຈົ້ານັ້ນສາ. ເຈົ້າບໍ່ຕ້ອງກຽງກະຍ່າ, ຂ້ອຍຮູ້ຈັກປາກບອນຂອງມັນນັ້ນດີ ...

ພຣິດເຂົ້າໃຈດີເຖິງວິທີການໂອ້ລົມສົນທະນາຂອງທ່ານຜູ້ພິພາກສາແລະເພິ່ນກໍລໍ່າແຍງເບິ່ງງ່ອນຕຸ້ຍເປັນຫນອກພົມຫງອກແຊມງາຂອງ ເວີຍຊະເລີຍຢູ່ຢ່າງງຽບໆ. ທ່ານຜູ້ພິພາກສາເວົ້າດ້ວຍຄວາມໂມໂຫ:

- ມື້ນີ້ ຂ້ອຍໄດ້ໄປຕັດສິນໂທດຂອງນັກເລງຫມໍຫນຶ່ງທີ່ບໍ່ຍອມສາລະພາບ. ຂ້ອຍຫາກໍຊິເລີ່ມຂຽນຄໍາຕັດສິນ. ທັນໃດນັ້ນ ກໍໄດ້ຍິນສະຫມຽນເວົ້າຂຶ້ນວ່າ: "ທ່ານ ເວີຍຊະເລີຍ, ທ່ານເປັນຫຍັງຫັ້ນ?" ຂ້ອຍເງີຍຫົວຂຶ້ນກໍເລີຍເຫັນຄົນທີ່ຢູ່ອ້ອມຂ້າງອ້ອມແອວນັ້ນແນມເບິ່ງຈົນຕາປອກ. ເຂົາເຈົ້າແນມເບິ່ງຂ້ອຍປານກັບແນມເບິ່ງຄົນທີ່ມາແຕ່ໂລກເບື້ອງນັ້ນ. ຂ້ອຍສັ່ງໃຫ້ພັກຜ່ອນຊົ່ວຄາວ ແລ້ວເຂົ້າໄປໃນຫ້ອງສ່ວນຕົວ, ສະຫມຽນຜູ້ນັ້ນເອົາແວ່ນໃບຫນຶ່ງມາໃຫ້ຂ້ອຍ...

- ແລ້ວເປັນຈັ່ງໃດອີກ? - ທ່ານຫມໍຖາມຢ່າງເຢືອກເຢັນ, ດ້ວຍສັນຊາດຍານຂອງນາຍແພດຜູ້ມີປະສົບການ, ເພິ່ນຮູ້ສຶກວ່າ ຂະນະນີ້ ຕ້ອງພະຍາຍາມຮັກສາຄວາມໃຈເຢັນທີ່ສຸດ.

ຜູ້ທີ່ມີອາຊີບຄົ້ນຄ້ວາພະຍາດທີ່ຜິດປົກກະຕິນັ້ນ ຈະສາມາດຊອກຫາອ່ານຄໍາບັນທຶກຕ່າງໆຂອງທ່ານຫມໍພຣິດ ລູກດ້ວຍຕົນເອງໄດ້. ຜູ້ກ່ຽວພຽງແຕ່ໄປທີ່ຫ້ອງການສໍານັກເອກະສານທີ່ແອຊູໂອເອີ ແລ້ວ ສະເຫນີຂໍເບິ່ງແຟ້ມເອກະສານນໍ້າເບີ ໑໒໑/໑໔ ເທົ່ານັ້ນກໍພໍແລ້ວ. ໃນນັ້ນ, ຫນ້າຫນຶ່ງຮ້ອຍຊາວເກົ້າ, ແມ່ນລາຍມືຂອງທ່ານຫມໍພຣິດເອງທີ່ຂຽນຄໍາລາຍງານໃສ່ເຈ້ຍເສດສິ່ງຫາສະມາຄົມແພດສາດ:

"ກໍລະນີພະຍາດຂອງທ່ານຜູ້ພິພາກສາເວີຍຊະເລີຍເປັນກໍລະນີທີ່ເຂົ້າໃຈຍາກ. ພາຍໃຕ້ພົນສະທ້ອນຂອງວິວັດການແຫ່ງພະຍາດເຊິ່ງເນື້ອແທ້ຂອງມັນຍັງບໍ່ທັນຮູ້ແຈ້ງເທື່ອ, ບັນດາພາກສ່ວນກະດູກໃບຫນ້າ, ຫນັງແລະບັນດາເຫຍື່ອແຫລວຢູ່ໃຕ້ຜິວຫນັງໄດ້ມີການປ່ຽນຮ່າງໄປ ..."

ຫລັງຈາກທີ່ແນມເບິ່ງໃບຫນ້າຂອງທ່ານຜູ້ພິພາກສາຢ່າງແຈ້ງຊັດ ໃນຕອນທີ່ເພິ່ນງວາກມານັ້ນແລ້ວ, ທ່ານຫມໍກໍຮ້ອງຂຶ້ນດ້ວຍຄວາມແປກໃຈ:

- ທ່ານ ເວີຍຊະເລີຍ, ທ່ານບໍ່ແມ່ນຄົນຜູ້ເກົ່າອີກແລ້ວ!

ເປັນຄວາມຈິງ, ມີແຕ່ອີງໃສ່ປາກແລະເສື້ອຄຸມເທົ່ານັ້ນ ເຂົາເຈົ້າຈຶ່ງສາມາດຈື່ໄດ້ວ່າ ຜູ້ທີ່ນັ່ງຢູ່ຕໍ່ຫນ້າທ່ານຫມໍ ພຣິດ ພ້ອມດ້ວຍແວ່ນທີ່ຖືຢູ່ໃນມືນັ້ນ ແມ່ນທ່ານຜູ້ພິພາກສາ ເວີຍຊະເລີຍ.

- ຂ້າພະເຈົ້າເອງກໍ່ຈື່ຂ້າພະເຈົ້າບໍ່ໄດ້, - ທ່ານຜູ້ພິພາກສາເວົ້າຢ່າງຂຸ່ນເຄືອງ. - ເມື່ອກັບມາຮອດເຮືອນແລ້ວ, ຂ້າພະເຈົ້າງົມເບິ່ງດັງຂອງຕົນ, ແລະຍ້ອນຢ້ານໂພດຂ້າພະເຈົ້າເລີຍເຮັດແວ່ນຢູ່ໃນຫ້ອງລ້າງຫນ້າແຕກໄປ. ຂ້າພະເຈົ້າເຫັນຫນ້າຂອງຕົນຄືກັບໂຕຫລົ່ນນີ້ລະ. ຮ້ວາຍ! ອີ່ ຊີວີ ມັນຮ້ອງກີກຂຶ້ນຢູ່ນອກປະຕູພຸ້ນ. ມັນຈອບຟັງ, ອີ່ອັບປີນັ້ນ...

ທ່ານຫມໍ ຟຣິດ ດັ້ງສະຕິຂຶ້ນມາໄດ້. ພາຍຫລັງທີ່ໃຊ້ດີນຊິດບັນດາເສດແກ້ວແຕກເຫລົ່ານັ້ນອອກໄປແລ້ວ, ເພິ່ນກໍ່ຈັບມືທ່ານຜູ້ພິພາກສາ.

- ຂໍຈົ່ງໃຈເຢັນໆ - ຂ້າພະເຈົ້າຈະຈັບກຳມະຈອນ. ທ່ານ, ຂໍເບິ່ງລີ້ນແດ່.

ພິທີການທາງດ້ານການແພດໄດ້ເລີ່ມຕົ້ນ. ເຄິ່ງຊົ່ວໂມງຕໍ່ມາກໍ່ສັງງສຸດລົງ. ທ່ານຫມໍຟຣິດຂຽນໃບສັ່ງຢາ:

- ຄະລຳການກິນດື່ມ...ຢາລ້າງດັງ...

- ຂ້ອຍຫວັງວ່າ, - ທ່ານຜູ້ພິພາກສາເວົ້າກະຈັ້ນກະຈໍ້. - ເຈົ້າຈະກັກຂັງຂ້ອຍໃຫ້ຢູ່ໃນເຮືອນແຕ່ສາມມື້ຫນຶ່ງຫວະ? ຂ້ອຍບໍ່ຂັດຂືນດອກ. ຂ້ອຍບໍ່ອາດຈະແບກຫນ້າແບບນີ້ໄປຫ້ອງການເທດສະບານໄດ້. ນັບວ່າເປັນຄັ້ງດຽວໃນຊີວິດທີ່ຂ້ອຍເອງຖືກກັກຂັງ.

ຂະນະດຽວກັນນັ້ນ ສຽງກະດິງໂທລະສັບກໍ່ດັງກ້ອງຂຶ້ນ. ທ່ານ ຫມໍເກົ້າຈັບເອົາຫູໂທລະສັບມາຟັງ. ຊຸນສານ ເຊີຍເຕີນຖາມມາວ່າທ່ານຟຣິດຢູ່ຫັ້ນບໍ່.

- ຈ້າວ, ຂ້າພະເຈົ້າພວມຢູ່ນີ້ເອງ, - ທ່ານຫມໍຕອບ. - ອາ, ທ່ານຕ້ອງການໃຫ້ຂ້າພະເຈົ້າໄປຫາທ່ານຫວະ? ດ້ວຍຄວາມເຕັມໃຈ. ບໍ່ມີຫຍັງເປັນການລົບກວນດອກ. ກົງກັນຂ້າມ, ມັນເປັນຫນ້າທີ່ຂອງຂ້າພະເຈົ້າ. ສຸຂະພາບຂອງທ່ານ ເວີຍຊະເລີຍຫວະ? ດີ...ໂອ, ທ່ານໄດ້ຂ່າວແລ້ວຫວະ? ໂອ, ເລື່ອງຂີ້ຜອຍດອກ...ມັນໃຄ່ນ້ອຍດຽວ. ແມ່ນຫຍັງເກາະ? ທ່ານຫາກໍ່ໃຄ່ຂຶ້ນໃຫມ່ໆນີ້ຫວະ? ດີຫລາຍ. ຫມາຍຄວາມວ່າ ຂ້າພະເຈົ້າຢາກຈະເວົ້າວ່າພະຍາດໃຄ່ລົກປົກຂຶ້ນນັ້ນມັນແມ່ນເລື່ອງຂີ້ຜອຍຊື່ໆດອກ...

ທ່ານຫມໍຟຣິດ ກ້າວໄປຮອດເຮືອນຂອງຊຸນສານເຊີຍເຕີນດ້ວຍອາລົມຈິດທີ່ບໍ່ຄ່ອຍປອດໂປ່ງພໍເທົ່າໃດຄືຫວ່າງຢ່ານີ້ອີກແລ້ວ. ຄວາມວິຕົກກັງວົນເລີ່ມເຂົ້າມາກຸກກວນຈຸ້ນວາຍຫົວສະ

ຫມອງຂອງເພິ່ນ, ຫົວສະຫມອງທີ່ຊິນເຄີຍກັບກະແສຊີວິດທີ່ງຽບສະຫງົບຢູ່ແອຊູໂອເອີແຫ່ງນີ້·
ບາງທີເຂົາເຈົ້າອາດຈະພວມຄົ້ນພົບໂງ່ນຫີນແມ່ຊ້າງທີ່ເຊື່ອງຊ້ອນຢູ່ໃນບ່ອນທີ່ປອດໄພທີ່ສຸດ.

## II

ອີງໃສ່ຄຳບັນທຶກຂອງທ່ານຫມໍ ຟຣິດແລ້ວ, ກໍລະນີທີ່ເກີດຂຶ້ນກັບທ່ານ ເຊີຍເຕີນ ຊຸນສານແຫ່ງແອຊູໂອເອີ ນັ້ນ, ກໍໄດ້ວ່າແປກຕ່າງແດ່ເລັກນ້ອຍ. ຕໍ່ມາ ແອເດີ ອີກພີ, ຜູ້ເຊິ່ງມີພອນສະຫວັນໃນການສະແດງລະຄອນໄດ້ເປັນເອກນັ້ນ ກໍໄດ້ເລົ່າຄືນໃຫ້ຂ້າພະເຈົ້າຟັງຢ່າງມີຊີວິດຊີວາ ກ່ຽວກັບທ່ານຫມໍ ຟຣິດ ແລະບັນດາຄົນປ່ວຍຂອງເພິ່ນ, ທັງນີ້ກໍເພາະວ່າຂ່າວລືຊ່າລືກັນ ກ່ຽວກັບຜູ້ຕິດພະຍາດແລະຫາຍພະຍາດດັ່ງກ່າວກໍຄືຄົນຜູ້ມີສ່ວນກ່ຽວຂ້ອງນຳເຂົ້າມາໃນຮ້ານຂາຍຢານີ້ຢູ່ເປັນປະຈຳ.

ຕອນເຊົ້າ, ໃນຂະນະທີ່ທ່ານຜູ້ພິພາກສາເວີຍຊະເລີຍ ພວມຂຽນສຳນວນຄະດີຂອງໂຈນຜູ້ຫນຶ່ງຢູ່ນັ້ນ, ຊຸນສານ ກໍພວມນັ່ງເຮັດວຽກຢູ່ໃນຫ້ອງການຂອງຕົນ ແລະມົວສຸມຢູ່ກັບການອ່ານຮ່າງພິໄນກຳເຊິ່ງໃນນັ້ນນາງຫມ້າຍ ອາລີຊາ ໂບລີວາ ຜູ້ຫນ້າເຄົາລົບນັບຖືຄຣິດຕະສາສະນິກກະຊົນຜູ້ຊະລາການຂອງພະຄຸນພໍ່ ອີແອເຣມີອາ, ໄດ້ມອບເງິນຄຳສົມບັດທັງຫມົດຂອງຕົນເປັນມູນຄ່າຫນຶ່ງພັນສາມຮ້ອຍສາມສິບຫລຽນຄຳໃຫ້ແກ່ສະມາຄົມເມດຕາທຳ.

ຜູ້ຊ່ວຍວຽກຄົນໃຫມ່ຂອງ ຊຸນສານກ້າວເຂົ້າມາໃນຫ້ອງເພື່ອຈະລາຍງານດ່ວນ. ຫມໍນີ້ເປັນຫລານຄົນຫນຶ່ງຂອງຢາແມ່ເຊື້ອຊຸນນາງ ຜູ້ຮັ່ງມີທີ່ໄດ້ນຳມາຝາກເນື້ອຝາກຕົວກັບທ່ານເຊີຍເຕີນ. ດ້ວຍເຫດນັ້ນ ຫມໍຈຶ່ງໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນຫໍພຳນັກຮັກສາການອັນເຄົາລົບຢຳເກງຂອງທ່ານຊຸນສານ. ແຕ່ແລ້ວ ພີ່ປ້ານ້າອາຂອງຫມໍວາງເງື່ອນໄຂ, ຂູ່ຈະກຸອນສິດສືບທອດມໍລະດົກໄປ ກ້າຫລານຂອງເຂົາຫາກບໍ່ປ່ອຍປະການຊ້ອມເຮືອຊ່ວງ. ເຂົາຄົນນັ້ນ ຄື ບົບແບັກໂວເອີ, ແລະກໍຕອນນີ້ແຫລະທີ່ ຂ້າພະເຈົ້າຢາກຈະເວົ້າຕື່ມວ່າ ບົບມີດວງຕາຄືຕາຫມູຕົ້ມ ແລະຫູສອງກ້ຳທີ່ຂີ້ເຮັ່ະຂີ້ຮ້າຍທີ່ສຸດ.

ເປັນອັນວ່າບົບ ກ້າວເຂົ້າໄປ, ຕຽມຈະໃຫ້ຂ່າວວ່າມີໂທລະສັບມາແຕ່ພາສາດ ໂອນມາຊູນ.

ທ່ານ ເຊີຍເຕີນຢຸດອ່ານ, ເລີກຄິ້ວຂຶ້ນຢ່າງເຄັ່ງຂຶມ. ແຕ່ບິບເກືອບບໍ່ສາມາດເວົ້າອອກມາເປັນຄວາມໄດ້. ຍ້ອນຄວາມຕົກສະເງີ້ ບິບຮູ້ສຶກວ່າ ຊຸນສານ ໄດ້ແຕ້ມຫນ້າດ້ວຍນ້ຳສີຫລືບໍ່ກໍແມ່ນໃສ່ຫນ້າກາກຂອງຊາວອິນເດຍແດງທີ່ເປັນຫນ້າຢ້ານກົວທີ່ສຸດ.

- ບິບ, ເປັນຫຍັງເຈົ້າຈຶ່ງເຮັດຕາຄ້າງແບບນັ້ນ? - ຊຸນສານ ຖາມດ້ວຍຄວາມໂມໂຫ.

ຕ້ອງໄດ້ພະຍາຍາມສຸດຂີດ ບິບ ຈຶ່ງເວົ້າອອກເປັນຄວາມຄິນໄດ້.

- ຂ້າແດ່ພະຜູ້ເປັນເຈົ້າ, - ຫມໍເວົ້າອັບອົ້ງ, - ທ່ານ ເຊີຍເຕີນ, ທ່ານເປັນຫຍັງຫັ້ນ?

ບິບບີຫາຍໄປຫມົດ. ຫນ້າກາກຢູ່ເທິງໃບຫນ້າຂອງຊຸນສານ ໃນຂະນະນີ້ ເບິ່ງແລ້ວຍິ່ງເປັນຫນ້າສະຫຍົດສະຫຍອງກວ່າເກົ່າ.

- ແມ່ນຫຍັງຫວະ! - ຊຸນສານແຜດຂຶ້ນແລະລຸກອອກຈາກຕັ່ງນອນເກົ່າໆຫນ່ອຍນັ້ນ.

- ຫນ້າຂອງທ່ານຫັ້ນນ່າ!... ບິບເວົ້າຂຶ້ນເປັນສຽງເຫລີແລ້ວຟ້າວບິບອອກຈາກຫ້ອງໄປ.

ຊຸນສານຄຶດແປກໃຈໃນພຶດຕິການຂອງບິບ. ພຶດຕິການນັ້ນມັນຜິດປົກກະຕິຢ່າງຈະແຈ້ງ. ບັກຜີບ້ານັ້ນມັນເວົ້າອັບໆອົ້ງໆອີ່ຫຍັງເກີ່ງຫນ້າເກີ່ງຕາເຮົາເກາະ? ແລ້ວຊຸນສານກໍອິດສາ ບິບກະດິ່ງເອີ້ນເຖິງສາມຄັ້ງ.

ພໍໄດ້ຍິນສຽງເອີ້ນ, ທິມ, ຄົນໃຊ້ຜູ້ຊະລາການຂອງຊຸນສານ ກໍກ້າວເຂົ້າມາ. ຫນ້າທີ່ຂອງອີ່ລຸງນີ້ແມ່ນທຸກໆຊົ່ວໂມງໃດກໍຕ້ອງນຳເອົານ້ຳຊາຮ້ອນປຸກໆຈອກຫນຶ່ງມາໃຫ້ແກ່ຊຸນສານ. ທິມ, ກືກາດໃສ່ຈອກນ້ຳຊາເຂົ້າມາ, ແຕ່ຮູບພາບທີ່ລຸງເຖົ້ານີ້ພົບເຫັນມັນປະຫລາດເຫລືອທີ່ສຸດ.

ທ່ານເຊີຍເຕີນ ຢືນຢູ່ເຊິ່ງປະຕູປ່ອງຢ້ຽມ, ພວມອອກແຮງຍົກບ່າຂຶ້ນ ແລະປະກົດວ່າພວມພະຍາຍາມແນມຈ້ຳຈີ້ຢູ່ກັບປະຕູແກ້ວ. ມັນໂລດແມ່ນຢູ່ໃນຫ້ອງເຮັດວຽກນີ້ບໍ່ມີແວ່ນ, ດັ່ງນັ້ນນາຍໃຫຍ່ຈຶ່ງແຍງເບິ່ງຕົນເອງຢູ່ກັບແກ້ວປ່ອງຢ້ຽມ. ແຕ່ນາຍໃຫຍ່ກໍບໍ່ໄດ້ແປກໃຈຫຍັງ ເມື່ອໄດ້ເຫັນແກ້ມເບື້ອງຫນຶ່ງຂອງຕົນໃຄ່ລົກປົກຂຶ້ນຢ່າງປະຫລາດ. ວຽກງານກ່ຽວກັບຄະດີແພ່ງທີ່ນາຍໃຫຍ່ພວມດຳເນີນຢູ່ນັ້ນ ໄດ້ເຮັດໃຫ້ຊຸນສານເສຍລັກສະນະທີ່ຫນ້າຈັບໃຈຂອງມະນຸດທີ່ມີຊີວິດຊີວານັ້ນ ກໍຄືລັກສະນະແຫ່ງຄວາມຮູ້ສຶກປະຫລາດໃຈນັ້ນເອງ.

- ແວ່ນ! - ເຊີຍເຕີນ ອອກຄຳສັ່ງຕໍ່ລຸງທິມຫ້ວນໆ.

ການແຍງເບິ່ງແກ້ມເບື້ອງທີ່ໃຄ່ຂຶ້ນຢູ່ຕັ້ງເປັນເວລານານນັ້ນ ບໍ່ໄດ້ພາທ່ານເຊີຍເຕີນສາມາດ

ຊອກຫາຂໍ້ສະຫລຸບຫຍັງໄດ້. ມີຢູ່ທາງດຽວຄື: ຕ້ອງສັ່ງໃຫ້ເອີ້ນທ່ານຫມໍ ຟຣິດມາຫາ. ສໍາລັບນາຍໃຫຍ່ແລ້ວ, ເລື່ອງນີ້ລາວຍອມຮັບເອົາໄດ້ກໍຕໍ່ເມື່ອວ່າ ຟຣິດຫາກບໍ່ຂຶ້ນລາຄາຕາມທີ່ໄດ້ກໍານົດໄວ້ແລະຈະມາປິ່ນປົວແຕ່ພຽງເທື່ອດຽວກໍພໍ. ຊຸນສານບໍ່ຢາກຈ່າຍເງິນໄປຢ່າງໄຮ້ປະໂຫຍດ ຍ້ອນຄວາມຫນຶ່ງທີ່ເຂົາເຈົ້າຈະເວົ້າກັບເພິ່ນ: "ໃຄ່ກໍແມ່ນໃຄ່ເທົ່ານັ້ນດີ." ແຕ່ບ່ອນໃຄ່ພາກຫຍ້ຳມັນນັ້ນປະກົດວ່າຍັງຍາກລາມອອກໄປຮອດຫູພຸ້ນອີກ.

- ທີມ, ຢ່າປ່ອຍໃຫ້ໃຜເຂົ້າມາທັງນັ້ນ, ນອກຈາກທ່ານຫມໍຟຣິດພຽງຜູ້ດຽວ. ແຕ່ແລ້ວ, ພ້າວກ່ອນ. ບາງທີ ທ່ານ ແບັກໂວເຣີ ກໍອາດຈະບໍ່ສະບາຍບໍ່ຈັກ?

ຄົນໃຊ້ຊະລາການທີ່ໄດ້ຮັບການຫລໍ່ຫລອມຜູ້ນີ້ເຂົ້າໃຈດີເຖິງທຸກໆກິລິຍາອາການພຽງນ້ອຍໆໃນສໍານຽງສຽງເວົ້າຂອງເຈົ້ານາຍ ແລະກົ້ມຫົວລົງ:

- ທ່ານ, ຂ້ານ້ອຍເກງຈະຕ້ອງໄດ້ເວົ້າ, ແຕ່...

ຄວາມວ່າ "ແຕ່" ນັ້ນຫມາຍເຖິງເລື່ອງທີ່ເປັນຫນ້າລໍາຄານໃຈສໍາລັບລຸງທີມນັ້ນ. ບົບມັກຈະລືມປະເພນີທີ່ຕ້ອງລັ່ງເຫລົ້າຂາວ ລຸງຜູ້ມັກເຮັດເສັ້ນຫມູ່ຜູ້ນີ້ ໃນວັນເສົາຂອງທຸກໆທິດ. ຂະນະທີ່ລຸງເກົ້າທີມ ກ້າວອອກຈາກຫ້ອງໄປນັ້ນ, ບົບພວມອ່ານອັນໃດຫນຶ່ງໃຫ້ແກ່ນາງສາວສະຫມຽນຍູຢ່າງພິດພື້ນ. ໃນຖານະທີ່ໄດ້ເຮັດວຽກຢູ່ໃນຫ້ອງການນີ້ມານານປີແລ້ວ, ລຸງທີມເກົ້າໄດ້ຊິມໃສ່ຫູຂອງ ບົບ ວ່າ:

- ຖ້າເຈົ້າຢາກເຮັດວຽກຢູ່ນໍາທ່ານ ເຊີຍເຕີນອີກຕໍ່ໄປແລ້ວ ເມື່ອແນມເຫັນໃບຫນ້າທີ່ຜິດປົກກະຕິຂອງເຈົ້ານາຍແລ້ວ ຢ່າໄດ້ຫລິງຮ້ອງແພດຂຶ້ນເປັນອັນຂາດ.

ເຊີຍເຕີນ ໂທລະສັບ ເພື່ອຊອກຫາຫມໍ ຟຣິດ. ທ່ານຫມໍໄດ້ມາປະກົດຕົວ, ເພິ່ນກວດພະຍາດໃຫ້ຊຸນສານ ແລ້ວກໍຂຽນໃບສັ່ງຢາ.

ເມື່ອທ່ານຫມໍຟຣິດອອກຈາກຫ້ອງການຂອງຊຸນສານໄປນັ້ນ ດວງອາທິດເກືອບວ່າຈະບ່າຍໄປສາແລ້ວ. ເພິ່ນຍ່າງໄປຕາມກະຫນົນ ຄົງ ຍັງບໍ່ທັນໄດ້ຮອດຮ້ອຍກ້າວ ກໍມີສາລະວັດຜູ້ຫນຶ່ງຈົ່ງຫນວດເທິງຮິມສົບ, ຕິດເຄື່ອງຫມາຍນາຍຈ່າ ແລ່ນຕາມມາ.

- ທ່ານຫມໍຟຣິດຫວະຫັ້ນ? - ສາລະວັດການພ້ອມທັງຍົກມືທີ່ໃສ່ຊົບສີຂາວນັ້ນຂຶ້ນມາວັນທາຫັດ.

- ບໍ່ວ່າດີເຈົ້າຊິຈື່ຂ້ອຍບໍ່ໄດ້, ພີລີ? - ທ່ານຫມໍຢຸດຢູ່, ແລະຍົກມືຂຶ້ນມາລູບປຸ່ມແກ້ມ.

- ຄວນແທ້ຂ້າພະເຈົ້າກໍຕ້ອງຈື່ໄດ້. - ນາຍຈ່າລາຍງານ. - ແຕ່ທ່ານ ຫົວຫນ້າສາລະວັດ...

- ທ່ານ ແພັຣດເຊີນ ເຈັບຫວະ? - ທ່ານຫມໍຖາມຍັ່ງເບິ່ງ.

- ຂໍທ່ານຈົ່ງອະນຸຍາດໃຫ້ຂ້າພະເຈົ້າໄດ້ລາຍງານ. ຫວ່າງເຊົ້ານີ້ ທ່ານຫົວຫນ້າສາລະວັດຍັງແຂງແຮງດີຢູ່. ແຕ່ຫລັງຈາກຮັບປະທານອາຫານເທື່ອທີສອງແລ້ວ, ໃນຂະນະທີ່ຍາແມ່ແພັຣດເຊີນຍ່າງເຂົ້າມາໃນຫ້ອງຮັບປະທານ - ບ່ອນເຊິ່ງຍາແມ່ໄດ້ປ່ອຍໃຫ້ສາມີຢູ່ຫັ້ນສອງສາມນາທີກ່ອນນັ້ນ, ກໍສັງເກດເຫັນວ່າໃບຫນ້າຂອງທ່ານແພັຣດ...

ນາຍຈ່າພີລີ ເດຣັກ ຍັງລາຍງານບໍ່ທັນຈົບຊ້ຳ. ທ່ານຫມໍພຣິດກໍຟ້າວແລ່ນໄປຫາເຮືອນຂອງພົວເມຍແພັຣດເຊີນ ໄວເຖິງຂັ້ນວ່າ ສາລະວັດຄົນນັ້ນບໍ່ອາດຈະນຳເພິ່ນທັນໄດ້. ຂະນະນັ້ນແອເດີ ພວມກອກນ້ຳ ກົ່ນ ສິບສອງອຸນກໍກັບສອງປ້ອກຊີໂອລີງໃສ່ແກ້ວຕາມບົງສັ່ງຢາທີ່ຄ້າຍຄືກັນຂອງທ່ານຫມໍພຣິດໃຫ້ທ່ານຜູ້ພິພາກສາແລະຂຸນສານ. ຜ່ານຈາກປະຕູປ່ອງຍ້ຽມຂອງຮ້ານຂາຍຢາ, ແອເດີ ແນມເຫັນທ່ານຫມໍ ພຣິດພວມແລ່ນໄປ ແລະນາຍຈ່າຄົນນັ້ນກໍໄລ່ຕິດຕາມໄປ. ຊີລີ ແລະອີ່ລູງທີມເກົ້າທີ່ພວມນັ່ງເພື່ອລໍຖ້າເອົາຢາກໍເຫັນເຊັ່ນນັ້ນ ແລະພວກເຂົາທັງສາມໄດ້ພາກັນຕວງເອົາວ່າ ພີລີພວມໄລ່ຈັບຕົວທ່ານຫມໍໄປກັກຂັງ. ຍາແມ່ ແພັຣດເຊີນ ຕ້ອນຮັບທ່ານຫມໍພຣິດ ດ້ວຍດວງຕາທີ່ຍິ້ມມະນາຍ້ອຍຍັ່ງຢູ່.

- ໂອຍ! ເປັນຫນ້າວິຕົກແທ້ໆ!...

- ຄົນເຈັບຢູ່ໃສ, - ທ່ານຫມໍຖາມທັນທີ, ລືມຮອດທັກທາຍຍາແມ່ເຈົ້າເຮືອນ ແລະລືມປົດຮອດຫມວກກະປາບນັ້ນ.

- ຢູ່ໃນຫ້ອງຮັບປະທານພຸ້ນເດ, - ຍາແມ່ແພັຣດເຊີນຕອບ ແລະໄຫ້ສະອຶກສະອື້ນຢູ່.

ທ່ານຫມໍຈຳຕ້ອງໄດ້ຍ່າງຜ່ານເສດເຄື່ອງແຕກທີ່ກອງເກັນຢູ່ນັ້ນໄປ. ຕໍ່ຈາກໂຕະມົນທີ່ຍັງມີເຄື່ອງເສດເຫລືອຂອງຄາບເຂົ້າເຊັ່ນ ແກ້ວ, ຈອກ ແລະຈະແຈ້ງວ່າມີທັງແວ່ນທຸກຊະນິດທີ່ມີຢູ່ໃນເຮືອນວາງໄວ້ຢູ່ເທິງນັ້ນ, ທ່ານຫົວຫນ້າສາລະວັດພວມນັ່ງຢູ່, ເປີດກະດູມເສື້ອຄຸມອອກຫມົດທຸກຫນ່ວຍແລະພວມສັ່ນຫົວເຊິ່ງພາໃຫ້ເກີດສຽງຢ່າງຫນຶ່ງທີ່ບໍ່ອອກເປັນສຳນຽງໃດໆດັງຂຶ້ນມາ.

- ມັນເລີ່ມໃຄ່ຈາກຮູດັງເບື້ອງຊ້າຍ, - ນາງ ແຟຣັດເຊີນພຶມພຳພ້ອມທັງນ້ຳຕາທີ່ພັງອອກມາເຕັມໜ້າແລະຍ່າງຕາມຫລັງທ່ານຫຳໄປ.

ແພເຊັດປາກຍັງຍັດຢູ່ເທິງເສື້ອກັກຂອງທ່ານແຟຣັດເຊີນຢູ່. ໝາຍຄວາມວ່າ ໄພພິບັດໄດ້ມາເກີງທ່ານຢ່າງກະທັນຫັນ ໃນຂະນະທີ່ພວມກິນຂອງຫວານຢູ່, ຂະນະນັ້ນບໍ່ມີໃຜສາມາດຄາດຄຶດໄດ້ວ່າ, ຍ້ອນກຳລັງແຮງອັນແປກປະຫລາດຢ່າງໃດຢ່າງໜຶ່ງ, ກະດູກໃບໜ້າຂອງທ່ານຈຶ່ງມີການປ່ຽນແປງທາງດ້ານພື້ນຖານໄປຢ່າງກະທັນຫັນເຊັ່ນນັ້ນ. ມັນໃຄ່ລາມໄປຮອດກະດູກໂຄງແຂ້ວແລະຄາງກະໄຕ ຈົນພາໃຫ້ໃບໜ້າຂອງທ່ານເປັນໜ້າເພດໜ້າຜີໄປ.

- ນີ້ແມ່ນລາຍທີ່ສາມແລ້ວ, - ທ່ານຫຳເວົ້າດ້ວຍນ້ຳສຽງອັນຕື່ນເຕັ້ນພ້ອມທັງວາງມືໃສ່ບ່າຂອງທ່ານແຟຣັດເຊີນ. - ແລ້ວຫາກຊິຮູ້ດອກ...ທ່ານພັນເອກ, ຈົ່ງຕັ້ງສະຕິສາ! ຢູ່ຕໍ່ໜ້າຂອງທ່ານແມ່ນຂ້າພະເຈົ້າ, ຫຳ ຟຣິດນ່າ...

ແຟຣັດເຊີນເງີຍໜ້າຂຶ້ນມາແນມເບິ່ງທ່ານຫຳ.

- ອາ, ທ່ານເອງຫວະ? ຂ້າພະເຈົ້າດີໃຈທີ່ສຸດ...ແຕ່ໃບໜ້ານີ້ມັນເປັນໜ້າອະເຫຍືອງທີ່ສຸດ! ຂໍໂທດນຳທ່ານ, ຂ້າພະເຈົ້າໝາຍເກີງຂ້າພະເຈົ້າເອງດອກ.

- ອ້າຍຊອກ, ຕັ້ງໃຈດີໆສາອ້າຍ! - ນາງແຟຣັດເຊີນ ເວົ້າດ້ວຍນ້ຳສຽງອ້ອນວອນແລະຊູແພມືນແສ່ວຂຶ້ນມາເຊັດຕາທັງຄູ່ທີ່ຍັງປຽກຢູ່ນັ້ນ.

- ຂ້ອຍບໍ່ຈຳເປັນວ່າ: ຈະຕັ້ງອີກຕັ້ງໃຈອີ່ຫຍັງນ່າ, - ແຟຣັດເຊີນ ຂັດຂືນຂຶ້ນມາດ້ວຍສຽງທີ່ມີສະຕິດີພໍຄວນ. - ນີ້ທ່ານຫຳ, ແມ່ຍິງຂອງຂ້າພະເຈົ້າວ່າແຕ່ມີເລື່ອງນ້ອຍໆຫຍັງເກີດຂຶ້ນກໍວິຕົກນຳໂລດ, ແຕ່ຂ້າພະເຈົ້າຢາກຟັງຄຳເຫັນຂອງທ່ານ. ຂ້າພະເຈົ້າແຍງແວ່ນແລະຖາມຕົນເອງ: "ແມ່ນເຮົາຫລືແມ່ນໃຜກັນ ?" ເລື່ອງມັນເປັນຈັ່ງຊັ້ນແຫລະ!

- ແລ້ວພວກເຮົາຈະຫາວິທີແກ້ໄຂໄດ້, - ທ່ານຫຳຟຣິດຕອບ. - ທ່ານຈົ່ງເລົ່າຄືນມາເບິ່ງດູວ່າເຫດການມັນເລີ່ມຕົ້ນຂຶ້ນມາແບບໃດ...

ຜົວເມຍແຟຣັດເຊີນ ເລົ່າຄືນ. ສ່ວນທ່ານຫຳ ຟຣິດນັ້ນພໍແຕ່ແນມເຫັນປັບ ກໍຮູ້ໂລດວ່າຕໍ່ໜ້າຂອງທ່ານຜູ້ນີ້ແມ່ນກໍລະນີທີສາມຂອງພະຍາດດຽວກັນ. ພະຍາດຫຍັງ? ຫຳຟຣິດເອງກໍບໍ່ຈັກ. ສິນມຸດວ່າຂະນະນີ້ເພິ່ນຫາກມີໂອກາດທັນໄດ້ເປີດເບິ່ງຊຸມປຶ້ມຊຸດ "ຂັດຈ້ອນ"

ທຸກໆເຫລັ້ມແລະ "ປະທານຸກົມແພດສາດຄົບຊຸດ" ຈຳນວນສິບຫົກເຫລັ້ມນັ້ນແລ້ວ, ເພິ່ນກໍຈະບໍ່ສາມາດຫາພົບ ແມ້ແຕ່ຄວາມດຽວທີ່ເດາະເດືອງເຖິງພະຍາດປ່ຽນໂສມຫນ້າຄືກັບທ່ານຜູ້ພິພາກສາ, ຊຸນສານ ແລະຫົວຫນ້າສາລະວັດພວມເປັນຢູ່ນີ້ຈາກປຶ້ມເຫລົ່ານັ້ນເລີຍ ຄັນຊັ້ນມັນເກີດຫຍັງຂຶ້ນລະ?

"ຍົກຕົວຢ່າງວ່າຮູບກ່າຍຂອງໃຜຄົນຫນຶ່ງທີ່ເຈົ້າຮູ້ຈັກດີ, ຫລັງຈາກຍ່ອງຍີມັນແລ້ວ, ຮູບຊົງຕ່າງໆຂອງມັນກໍຈະບຸ້ມບັງວໄປຈົນວ່າບໍ່ຄືເກົ່າອີກ." ທ່ານ ຟຣິດໄດ້ບັນທຶກຄຳເຫລົ່ານີ້ດ້ວຍລາຍມືຕົນເອງໄວ້ໃນຫນ້າສອງຮ້ອຍສີ່ສິບເກົ້າຂອງແຟ້ມສຳເນົາເອກະສານດັ່ງກ່າວນັ້ນ.

ແຕ່ຢ່າງໃດກໍຕາມ ທ່ານ ແຟຣັດເຊີນ ກໍຍັງມີຄວາມວິຕົກກັງວົນທີ່ສຸດ.

- ບໍ່ມີໃຜສາມາດຈະມາບັງຄັບໃຫ້ຂ້າພະເຈົ້ານອນຢູ່ເຮືອນໄດ້. ວຽກ, ທ່ານຫມໍເອີຍ, ທ່ານເຂົ້າໃຈດີ? ຂ້າພະເຈົ້າຕ້ອງເຮັດວຽກ, ບໍ່ແມ່ນຊິມາເຈັບມາເປັນຫລິ້ນຢູ່ຫນີ້.

- ທຸກສິ່ງທຸກຢ່າງຫາກຊິເປັນໄປໂດຍດີດອກນ່າ, - ທ່ານຫມໍເວົ້າພຶມໆ.

ແລ້ວເພິ່ນກໍເວົ້າຊ້າໆອີກ. ຄວາມຄິດຕ່າງໆເຮັດໃຫ້ເພິ່ນກ້າວໄປສູ່ການສະຫລຸບດັ່ງນີ້: "ເຊື່ອແນ່ວ່າຍັງມີຫລາຍບັນຫາທີ່ບໍ່ທັນຈະແຈ້ງ. ດັ່ງນັ້ນ ດີກວ່າຫມູ່ຫມໍຄວນວາງວິທີປົວພະຍາດພໍຊາມຊາໄປກ່ອນ."

- ເອີ, ທ່ານເຮັດໃຫ້ຂ້າພະເຈົ້າມີຄວາມອຸ່ນໃຈ, - ແຟຣັດເຊີນ ເວົ້າດ້ວຍຄວາມແນ່ໃຈແລ້ວຍ່າງໄປທີ່ຕູ້ອາຫານ. - ຂ້າພະເຈົ້າຮູ້ສຶກວ່າຕົນມີຄວາມແຂງແຮງດີຢູ່. ການປ່ຽນແປງໃບຫນ້ານີ້ບໍ່ມີຫຍັງແຕະຕ້ອງເຖິງວຽກງານດອກ. ນີ້ທ່ານຫມໍ, ນີ້ທ່ານຈົ່ງບອກມາດູວ່າ, ຕໍ່ອາການພະຍາດຂອງຂ້າພະເຈົ້າໃນຂະນະນີ້ ຄວນຈະໃຊ້ເຫລົ້າຢ່າງໃດດີ - ໂຮມ ຫລືວ່າ ໂກຍັກ?

ຂໍ້ສະຫລຸບໃຫມ່ຢ່າງຫນຶ່ງໄດ້ຫລຸດອອກຈາກປາກທ່ານຫມໍ ຟຣິດກໍຄື:

- ນີ້ມັນບໍ່ແມ່ນພະຍາດ, ແຕ່ມັນແມ່ນປະຕິກິລິຍາຢ່າງຫນຶ່ງຂອງຮ່າງກາຍຊື່ໆດອກ.

ແຟຣັດເຊີນ ກົ້ມວຽງວຽນໆຢູ່ກັບແກ້ວເຫລົ້າທີ່ຕູ້ເຄື່ອງກິນ.

- ບໍ່ແມ່ນພະຍາດຫວະຊັ້ນ? ກໍດີແລ້ວຊັ້ນນ່າ! ແຕ່ປະຕິກິລິຍາຂອງຮ່າງກາຍກໍຍັງພໍຊິມີທາງຈະກັບສູ່ສະພາບປົກກະຕິ...

ທ່ານ ແຟຣັດເຊີນ ລືນເຫລົ້າໂຮມລົງສອງຈອກ, ເມື່ອຫມົດໄປຈອກຫນຶ່ງ, ຫນ້າກໍແດງຮຸນໆຂຶ້ນ, ແຕ່ສຽງຂອງທ່ານຟັງແລ້ວມັນແຜ່ວເບົາກ່ວາເກົ່າ:

- ດື່ມແມ້, ທ່ານຫມໍ, ແລະກໍບໍ່ຕ້ອງອົບອຸ່ນຂ້າພະເຈົ້າອີກ. ຂ້າພະເຈົ້າເປັນຊາຍຊາດທະຫານຜູ້ຫນຶ່ງແລະເຄີຍປະເຊີນຫນ້າກັບອັນຕະລາຍທຸກຢ່າງມາແລ້ວ. ມື້ວານນີ້ຢູ່ທີ່ໂຮງກາຍຍະສິນທີ່ສະຫນາມຫລວງລະນັ້ງທີ່ໄດ້ຮັບການຝຶກແອບເປັນຢ່າງດີຕົວຫນຶ່ງ ກໍເປັນພະຍາດອັນນີ້. ຂ້າພະເຈົ້າໄດ້ຫມູນໃຊ້ວິທີການຂອງດົນຕີສົ່ງພະນັກງານສັດຕະວະແພດຜູ້ຫນຶ່ງໄປ. ຂ້າພະເຈົ້າໄດ້ຂ່າວກ່ຽວກັບການເຈັບເປັນຂອງທ່ານຜູ້ພິພາກສາ, ຂອງຊຸນສານ ແລະກໍຮູ້ໄວ້ລ່ວງຫນ້າແລ້ວວ່າ ທ່ານຫມໍ ຟຣິດຈະຕ້ອງໄດ້ເຮັດວຽກຫລາຍທີ່ສຸດ. ທ່ານບໍ່ຢາກດື່ມຊັ້ນຫວະ? ຄັນຊັ້ນກໍລາກ່ອນ. ບໍ່ຕ້ອງຈັບມືຂ້າພະເຈົ້າ - ເອົາແບບນັ້ນດີກ່ວາ...

ທ່ານຫມໍຟຣິດຈໍາຕ້ອງຈັບເອົາຫມວກແລະໂນ້ມຕົວທໍາຄວາມເຄົາລົບ. ເພິ່ນກຸາມນາງແຟຣັດເຊີນເຊິ່ງຂະນະນັ້ນພວມລໍຮັບເພິ່ນຢູ່ທີ່ລະບຽງ ວ່າບ່ອນລ້າງມືຢູ່ໃສ, ແລ້ວເພິ່ນກໍກັງວົງວຽນໆຢູ່ກັບກ້ອນນໍ້າຕັ້ງດິນ, ເພິ່ນລ້າງມືດ້ວຍສະບູແລະແປງເປັນຢ່າງດີ.

## III

ມື້ນັ້ນ ທ່ານຫມໍ ຟຣິດບໍ່ສາມາດຮັບປະທານອາຫານທ່ຽງໃຫ້ຖືກຕ້ອງຕາມເວລາກໍານົດທີ່ເປັນປະເພນີຂອງເພິ່ນໄດ້. ເພິ່ນອອກຈາກເຮືອນຂອງແຟຣັດເຊີນໄປກໍພໍດີ ນາຍເກີ ຄົນຍາມປະຕູໂບດ ຟ້າວແລ່ນມານໍາເພື່ອເອີ້ນໄປຫາຄົນເຈັບລາຍທີ່ສີ່ອີກ.

ພະຄຸນພໍ່ ອີແອເຣມີອາ ນອນຢູ່ໃນຫ້ອງນອນ, ຢູ່ອ້ອມຂ້າງອ້ອມແອວຂອງເພິ່ນແມ່ນບັນດາກິ່ງນໍ້າອຸ່ນ. ໃນເງົາມືດພໍມຸມມົວຄືລາງຜັນນັ້ນສິ່ງທ່ານຫມໍສາມາດແນມເຫັນໄດ້ແຈ້ງກໍຄືໂຕະຫນ່ວຍທີ່ຕັ້ງຢູ່ຫົວຕຽງນັ້ນພຽງຢ່າງດຽວ. ພວກຍາແມ່ຊຸນນາງທີ່ຫນ້ານັບຖືສາມຄົນ ພາກັນນັ່ງຢູ່ເທິງຕັ່ງອີ້ຂ້າງຕຽງຂອງພະຄູຫລວງຢ່າງສະຫງຽມຄ່ຽມຄົມ. ຫນຶ່ງໃນພວກຍານາງທັງສາມນັ້ນພວມອ່ານພະຄໍາພີອະທິຖານເປັນສຽງດັງໆຢູ່. ພໍແຕ່ໄດ້ຍິນສຽງອ່ານນັ້ນ ທ່ານຫມໍກໍຈື່ໄດ້ທັນທີ, ນັ້ນແມ່ນຍາແມ່ແບັກໂວເຣີ, ຄົນເຈັບເກົ່າຂອງຕົນ, ຊຶ່ງເປັນອາຂອງນັກກີລາບິນ. ໃນກຸ່ມຄົນເຫລົ່ານັ້ນ ບໍ່ມີໃຜສົນໃຈກັບທ່ານຫມໍທີ່ພວມຍ່າງເຂົ້າໄປນັ້ນເລີຍ, ເພາະທັງສາມ

ລ້ວນແຕ່ພວມເພີ່ມິວຢູ່ກັບການອ່ານພະສູດນັ້ນດ້ວຍຄວາມເຄົາລົບຢຳແຢງ.

- ແລະຂໍແຕ່ພະຜູ້ເປັນເຈົ້າຈົ່ງຊົງເມດຕາແດ່ຂ້ອຍຂ້າຜູ້ບໍລິສຸດຂອງພະອົງ, - ຍິງຊະລາອ່ານ, ໄດ້ຮອດສາມຄວາມໃດ ລາວກໍກອບທັນໃຈຍາວຂຶ້ນຢ່າງໂສກລະທົມຄັ້ງໜຶ່ງ. - ພວກຂ້າພະບາດຂໍນ້ອມກວາຍຄວາມຄາລະວະຢຳແຢງມາຍັງພະຜູ້ເປັນເຈົ້າ, ຂໍເຫລື້ອມໃສໃນພະຜູ້ເປັນເຈົ້າຈົນຊົ່ວນິລັນດອນ...

- ອາແມນ, - ນ້ຳສຽງອັນອ່ອນເພຍຂອງພະຄູອີແອເຣມີອາ ຫລຸດອອກມາ. - ໃຜເຂົ້າມາຫັ້ນ? ອາ, ທ່ານເອງຫວະ, ທ່ານຫມໍທີ່ຮັກແພງ?

- ສະບາຍດີຄຸນພໍ່ຫລວງ, ຄຸນພໍ່ຫລວງເປັນແນວໃດ? - ທ່ານຫມໍເວົ້າດ້ວຍຄວາມຄ່ຽມຂຶມ. ໂນ້ມຕົວໄປທາງເບື້ອງຫົວຕຽງແລະທາງຍາແມ່ທັງສາມດ້ວຍຄວາມເຄົາລົບຢຳເກງ.

- ສະບາຍດີ ພໍ່ອອກ, - ພະຄຸນພໍ່ ອີແອເຣມີອາ ເອີ່ຍເປັນສຽງຄວນຄາງອອກມາອີກ. - ພໍ່ອອກມາຫາຜູ້ທີ່ພວມລະທົມຂົມຂື່ນນີ້ມັນເປັນອະນິສົງຍິ່ງ, ເພາະມີຄວາມຫນຶ່ງຂຽນໄວ້ໃນພະຄຳພີວ່າ: "ຂ້າພະເຈົ້າເຈັບເປັນ, ແລະເຂົາເຈົ້າໄດ້ມາຢ້ຽມຢາມຂ້າພະເຈົ້າ."

- ມີຫຍັງເກີດຂຶ້ນກັບຄຸນພໍ່ນໍ້? - ທ່ານຫມໍພຶດການ, ແລ້ວຫຍັບໄປໃກ້ຕຽງ. - ຢູ່ນີ້ມືດໂພດ, ຈະຕ້ອງເປີດໄຟຂຶ້ນ...

ຄຸນພໍ່ໂບກມືປະຕິເສດຢ່າງອ່ອນເພຍ.

- ຢ່າແຫລະ, ບໍ່ຕ້ອງເປີດໄຟດອກ. - ອັດຕະມາຫາກໍຟັງຄຳອະທິການຂອງເທວະດາ ໂບນີຟາຊີ, ບັນດາສຳນວນອັນແສນກະຕຸ້ນໃຈຂອງພະອົງຍັງຄົງກ້ອງກັງວານຢູ່ໃນດວງໃຈຂອງອັດຕະມານີ້...

- ຍາແມ່ ແບັກໂວເຣີ ຍັງອ່ານພະຄຳພີອະທິການບໍ່ທັນຈົບເທື່ອ. - ສຽງອັນເຄັ່ງຂຶມຂອງຍາແມ່ຜູ້ທີ່ສອງດັງຂຶ້ນ.

- ເອີ, ອັດຕະມາຊາບແລ້ວ ແມ່ອອກ ໂບລີວາ, ຜູ້ມີນ້ຳໃຈແສນປະເສີດຂອງເຮົາເອີຍ. - ພະຄຸນພໍ່ ອີແອເຣມີອາ ເວົ້າພຸມໆດ້ວຍນ້ຳສຽງທີ່ນຸ່ມນວນກວ່າເກົ່າອີກ. - ໃນພະຄຳພີນີ້ຍັງຢູ່ສິບດທີ່ຍັງບໍ່ທັນໄດ້ອ່ານ, ແຕ່ພະຜູ້ເປັນເຈົ້າອົງຊົງມີບາລະມີທີ່ຄຸນຈະເມດຕາກະລຸນາຕໍ່ຜູ້ທີ່ພວມທຸກຂະເວທະນາຢູ່ນີ້.



21–952

ທ່ານຫມໍ ພຣິດ ບໍ່ສາມາດຈະອົດທົນແລະຫ້າມຕົນເອງໄວ້ໄດ້ອີກແລ້ວ. ເພິ່ນພວມຫິວ ແລະອິດເມື່ອຍຍ້ອນວຽກງານອັນຫຍຸ້ງເຫຍືອງສັບລະວົນ ທີ່ກອກກຸ້ມລົງໃສ່ຫົວຂອງເພິ່ນຕະຫລອດມື້ນີ້. ເພິ່ນໂນ້ມຕົວລົງເພື່ອຈະເບິ່ງຫນ້າຄົນເຈັບໃຫ້ຄັກໆ, ແຕ່ບັງເອີນໃນເວລານັ້ນເພິ່ນກໍຮູ້ສຶກວ່າຣິມສົບຂອງພະຄຸນພໍ່ຫລວງຊູນຖືກຫູຂອງຕົນແລະໄດ້ຍິນສຽງຊິ່ມອັນເຂັ້ມຂຸ້ນຂອງພະຄຸນພໍ່ວ່າ:

- ພຣິດທີ່ຮັກແພງ, ຂໍທ່ານຈົ່ງຊ່ວຍໃສຫົວຊຸມຍາແມ່ນີ້ອອກໄປໃຫ້ແດ່.

ສະເພາະທ່ານຫມໍແລ້ວ, ການທີ່ຈະລຸກຂຶ້ນຢືນຊື່ໆ ເພື່ອທຳຊົງໃຫ້ເຖົ້າຂຶມນັ້ນມັນເປັນພຽງການກະທຳໃນຊົ່ວຍົບຍາມເທົ່ານັ້ນ.

- ຍາແມ່ທັງຫລາຍ, ຂ້າພະເຈົ້າ ຂໍຮ້ອງນຳພວກຍາແມ່ຈົ່ງປ່ອຍໃຫ້ຂ້າພະເຈົ້າໄດ້ໂອ້ລົມກັບຄົນເຈັບເປັນການສ່ວນຕົວແດ່, - ທ່ານຫມໍເວົ້າດ້ວຍນ້ຳສຽງທີ່ດັງກັງວານ - ເຖົ້າຂຶມທັງສັ່ນຫີບອັນພາໃຫ້ບັນດາຊີແລ້ງສີດຍາແລະຫລອດແກ້ວວິຊາສະເພາະຕ່າງໆດັງຄຸງ - ຄົງ-ຄຸງ-ຄົງຂຶ້ນ ເຫມືອນກັບເປັນລາງບອກອັບປະມົງຄຸນຢ່າງໃດຢ່າງຫນຶ່ງ.

ໂດຍຕຶກສະທ້ານຕໍ່ສຽງດັງຄຸງໆ-ຄົງໆຂອງບັນດາຫລອດແກ້ວທີ່ຊົນຕຳກັນ, ພວກຍາແມ່ກໍພ້າວລຸກຂຶ້ນໂລດ.

- ຍາດໂຍມທັງຫລາຍຂອງອັດຕະມາເອີຍ, ພາກັນໄປນັ່ງຖ້າຢູ່ຫ້ອງຮັບແຂກພຸ້ນກ່ອນເດີ, - ຄຸນພໍ່ ແອເຣມີອາ ເວົ້າຂຶ້ນດ້ວຍສຽງຄວນຄາງ. - ອີກຄາວຫນຶ່ງອັດຕະມາອາດຕ້ອງການເຖິງການຊ່ວຍເຫລືອອັນແສນປະເສີດຂອງຍາດໂຍມກໍເປັນໄດ້. ຍາດໂຍມທັງຫລາຍຄົງຈະຕ້ອງໄດ້ໄປເຖິງສັນຕິສຸກ. - ດ້ວຍທ່າທາງອັນຄ່ຽມຂຶມ, ຍາແມ່ທັງສາມຍ່າງອອກຈາກຫ້ອງນອນໄປ. ແລ້ວທ່ານຫມໍພຣິດກໍອັດຕູໄວ້.

- ທ່ານຈົ່ງຫລັ່ນກຸນແຈໄວ້ຈັກສອງຮອບ ແລ້ວປິດຜ້າກັ້ງປະຕູລົງແດ່.

ທ່ານຫມໍ ພຣິດ ໄດ້ປະຕິບັດຢ່າງຖືກຕ້ອງກັບຄຳຮຽກຮ້ອງຕ້ອງການນັ້ນທຸກຢ່າງ.

- ດຽວນີ້...- ທ່ານຫມໍຫາກໍເລີ່ມເວົ້າ, ມືຍັງຈັບເຊືອກສີເຫລືອງທີ່ໃຊ້ເພື່ອຜູກຜ້າກັ້ງປະຕູທີ່ເຮັດດ້ວຍແພກຳມະຍີ່ນັ້ນຢູ່.

- ດຽວນີ້, -ຄຸນພໍ່ ອີແອເຣມີອາ ເວົ້າດ້ວຍສຽງຂອງຄົນທີ່ແຂງແຮງດີຜູ້ຫນຶ່ງ, ພ້ອມທັງ

ຊິດຜ້າຫົ່ມອອກແລ້ວລຸກຂຶ້ນມານັ່ງຢູ່ຂອບຕຽງ, – ຈົ່ງອະນຸຍາດໃຫ້ອັດຕະມາໄດ້ຂອບໃຈນຳພໍ່ອອກທີ່ໄດ້ຊິດຊ່ວຍເອົາອັດຕະມາໃຫ້ຫລົດພົ້ນໄປຈາກພວກຍາແມ່ເຫລົ່ານັ້ນ. ເຂົາເຈົ້າເປັນສາສະນິກກະຊົນທີ່ນັບຖື, ຈະເຮັດຈັ່ງໃດໄດ້...ຖ້າອັດຕະມາເອງຈະເປັນຜູ້ຮ້ອງຂໍໃຫ້ເຂົາເຈົ້າອອກໄປມັນກໍນັບວ່າເປັນເລື່ອງບໍ່ເຫມາະສົມ...

– ຄັນຊັ້ນພະຄຸນພໍ່ຫລວງກໍຍັງແຂງແຮງດີຢູ່ແມ່ນບໍ່? – ທ່ານຫມໍພຣິດເວົ້າພຸມໆ.

– ອັດຕາະມຮູ້ສຶກວ່າຕົນບໍ່ໄດ້ເຈັບເປັນເກົ່າຂັ້ນຈະຕ້ອງເຮັດໃຫ້ແມ່ຍິງຊຸມນີ້ເຂົ້າມາວຸ້ນວາຍຢູ່ໃນນີ້. – ສຽງຂອງຄຸນພໍ່ ແອເຣມີອາດັງກັງວານຂຶ້ນ. – ແມ່ນແທ້, ແຕ່ເຊົ້າມານີ້ ອັດຕະມາຕ້ອງຫລັບຫນ້າຫລັບຕາທຸກໆຄືນມາຢູ່ໃນຫລັງຜ້າກັ້ງນີ້.. ພໍ່ອອກຈົ່ງເປີດໄຟຂຶ້ນແລ້ວເບິ່ງຊ່ວຍແດ່...

ທ່ານຫມໍງົມຫາກົງດັກໄຟ ແລ້ວຊຸມດອກໄຟທີ່ເປັນພວງຢູ່ນັ້ນກໍຮຸ່ງສະຫວ່າງຂຶ້ນຈົນສາມາດສ່ອງເຫັນຄຸນພໍ່ທີ່ພວມນັ່ງຢູ່ນັ້ນຢ່າງແຈ່ມແຈ້ງ. ທ່ານຫມໍພຣິດພັບຕາເພືອບໆຢູ່ດ້ວຍຄວາມແປກໃຈ. ຫນ້າຂອງຄຸນພໍ່ອີແອເຣມີອາ ບັງວໄປຄືມີຄົນຈັບບິດ. ນີ້ແມ່ນກໍລະນີທີ່ສີ່ຂອງພະຍາດອຸບາດນີ້ອີກແລ້ວ! ສະເພາະທ່ານຫມໍພຣິດແລ້ວມີຄົນປ່ວຍຕັ້ງສາມສີ່ກໍລະນີໃນມື້ດຽວກັນເຊັ່ນນີ້ມັນຫລາຍໂພດແລ້ວ.

– ເປັນຕາຢ້ານທີ່ສຸດແມ່ນບໍ່? – ຄຸນພໍ່ອີແອເຣມີອາ ຖາມຍັ່ງເບິ່ງທ່ານຫມໍ. – ອັດຕະມາຢ້ານຈົນບໍ່ກ້າຈະແຍງແວ່ນ, ພໍປານກັບວ່າ ອັດຕະມາ ຖືກໃຜຊັດຈົນຫນ້າບັງວນີ້ແຫລະ. ອັດຕະມາບໍ່ມັກການປ່ຽນໂສມຫນ້າແບບນີ້ຈັກດີ້ເລີຍ. ໃນພະຄຳພີໄດ້ເວົ້າໄວ້ວ່າ: "ໃບຫນ້າຄືພະຍານຂອງເຈົ້າ". ແຕ່ແລ້ວ, ໃບຫນ້າໃຄ່ລົກປົກນີ້ຂອງອັດຕະມາຈະເປັນພະຍານພີສັງໄດ້? ໃນບົດກະວີຫນຶ່ງຂອງ ໂບຣອູນີຂຽນໄວ້ວ່າ: "ໂອຍອ້າຍທີ່ຮັກ, ວິນຍານຂອງອ້າຍສົ່ງກິ່ນອາຍອັນຫອມຫວນອອກມາທາງ ສີຫນ້າ". ແຕ່ເຮັດຈັ່ງໃດອັດຕະມາຈຶ່ງຈະກ້າແບກໃບຫນ້າແບບນີ້ອອກຕໍ່ຫນ້າຊຸມສາສະນິກກະຊົນຂອງອັດຕະມາໄດ້. ເຂົາຈະມີຄວາມຄິດບໍ່ດີຕ່າງໆນາໆຕໍ່ວິນຍານຂອງອັດຕະມາ. ພຣິດ, ອັດຕະມາ ຂໍເວົ້າຢ່າງເປີດໃຈກັບທ່ານໃນນາມຫມໍຈິດຕະແພດຜູ້ຫນຶ່ງທີ່ສາມາດຈະເປີດເຜີຍທຸກຢ່າງຕໍ່ນາຍແພດ ກ່ຽວກັບເລື່ອງຮ່າງກາຍ.

– ມີເລື່ອງຫຍັງລະ? – ທ່ານຫມໍຖາມຢ່າງເຍັນຊາ. ທ່ານຫມໍບໍ່ໄດ້ສົນໃຈຫຍັງກັບບົດກະວີ

ຮັກຂອງໂບຣອູນີ ກໍຄື ສຳນວນຄຳເວົ້າຕ່າງໆທີ່ຄັດອອກມາຈາກພະຄຳພີນັ້ນເລີຍ. ເພິ່ນພວມຄົ້ນຄິດຫາແຕ່ເຫດການຕ່າງໆເທົ່ານັ້ນ.

- ແລ້ວພໍ່ອອກຈະຮູ້ດອກ, - ຄຸນພໍ່ອີແອເຣມີອາ ເວົ້າ, ແລ້ວຍືນຂຶ້ນ, ຍ່າງໄປຫາໂຕະທີ່ຕັ້ງຢູ່ຂ້າງປະຕູບ່ອງຢ້ຽມ. ພະຄຸນພໍ່ຣີແພທີ່ປົກຢູ່ເທິງຈານ ແລະກ້ວຍໃສ່ຂອງກິນໃບຕ່າງໆອອກ. ໂອ, - ຄຸນພໍ່ເຊັດມືດ້ວຍຄວາມເບີກບານໃຈ. - ພວກຍາແມ່ນັ້ນຫ່ວງໃຍອຸປະຖາກອັດຕະມາ. ແຕ່ເຊົ້າມານີ້ ອັດຕະມາຍັງບໍ່ທັນກິນຫຍັງເທື່ອ, ຍອມອົດຫິວຢູ່ແລະຄອຍຖ້າແຕ່ພໍ່ອອກ. ແຕ່ລຳບາກເກືອບຕາຍ ມາຍເກີ ຈຶ່ງຫາພໍ່ອອກພົບ. ພໍ່ອອກຫຍຸ້ງນຳວຽກຫລາຍ ແລະເຊື່ອແນ່ວ່າຍັງບໍ່ທັນໄດ້ກິນຫຍັງ. ເອົາລະ, ພໍ່ອອກນັ່ງລົງນີ້ແລ້ວກິນເຂົ້າສາ...ອິ່ວຊີ້ນນົກປ່າຢ່າງດີໃດນີ... ກ້າວ່າຍາແມ່ ໂບລີວາເປັນຜູ້ແຕ່ງ ແລ້ວມັນກໍຍົກໂປ້ໂລດແລ້ວ. ພວກຄົນເຈັບກໍຄືກັນກັບພວກແມ່ອອກເຫລົ່ານັ້ນ, ເຂົາເຈົ້າເຮັດໃຫ້ທ່ານບໍ່ໄດ້ຮັບປະທານອາຫານທ່ຽງຖືກຕ້ອງຕາມເວລາ:

- ຄຸນພໍ່ເວົ້າຖືກ, - ທ່ານຫມໍ ຟຣິດເວົ້າ, ຫັນໃຈຍາວໆພ້ອມທັງນັ່ງລົງຂ້າງໂຕະ. - ໃບກ້ວຍນີ້, ປະກົດວ່າແມ່ນ, ລາບປາຟາຍັກ.

- ແມ່ນແລ້ວ, ເຄື່ອງກິນຂອງແມ່ອອກ ແບັກໂວເຣີ ເອົາມາເຄນໃດຫັ້ນ. ເອົາລະ, ພວກເຮົາມາລົງມືກິນປາຟານີ້ກ່ອນເທາະ.

ຄຸນພໍ່ ອີແອເຣມີອາ ຈັບເອົາແກ້ວອັນຫນຶ່ງຂຶ້ນມາ, ໄຂຈຸກອອກແລ້ວດົມໆເບິ່ງ:

- ໂອ, ເຫລົ້າ ຣີແບັດນີກຣັມ...ຂອງແມ່ອອກ ໂລຕີ ປຸງແຕ່ງເອງໃດນີ. ແຕ່ລະຄາບຕ້ອງການພຽງນ້ອຍດຽວ ກໍພໍ. - ຄຸນພໍ່ເທຍັ້ນເຫລົ້າລົງໃສ່ຈອກນ້ອຍ.

ໂຄງແຂ້ວຂອງ ຄຸນພໍ່ຫຍ້ຳຢູ່ປານກັບໂຮງບົດເຂົ້າທີ່ປະກອບຢ່າງປານີດ, ທານ້ຳມັນມື່ນພວມບົດກ້ອນເຂົ້າຈີ່ຂາງໃສ່ເບີ ແລະເນີຍແຂງເອົາໂລດ.

- "ພາລະບົດບາດລະບົບເຄື່ອງຫຍ້ຳຂອງຄຸນພໍ່, - ທ່ານຫມໍໄດ້ບັນທຶກໄວ້ໃນຕອນຕໍ່ມາ, - ຍັງຄົງໄດ້ຮັບການປົກປ້ອງໄວ້ຢ່າງສົມບູນ. ເຖິງແມ່ນຮ່າງໂຄງແຂ້ວທັງສອງກ້ຳຖືກປ່ຽນແປງໄປຢ່າງຫລວງຫລາຍແລ້ວກໍຕາມ, ພິເສດແມ່ນໂຄງແຂ້ວເບື້ອງລຸ່ມ, ມັນກາຍເປັນຮູບວົງມົນໄປເລີຍ".

ກິນອີ່ມແລ້ວ, ທ່ານຫມໍ ຟຣິດກໍຮູ້ສຶກວ່າຕົນບໍ່ຢາກນັ່ງຢູ່ນີ້ຕໍ່ໄປອີກເລີຍ. ອີກຢ່າງຫນຶ່ງຂໍ້ສັນນິຖານຂອງ ແຟຣັດເຊີນ ກ່ຽວກັບລັກສະນະຕົດແປດຂອງພະຍາດນັ້ນໄດ້ຈຳໃຫ້ທ່ານຫມໍຕ້ອງມີຄວາມລະວັງຕົວ. ວານນີ້, ທ່ານຫມໍໄດ້ງິນເຂົາເວົ້າກັນເຖິງເລື່ອງໃດເລື່ອງຫນຶ່ງທີ່ເກີດຂຶ້ນໃນໂຮງກາຍຍະສິນເຄື່ອນທີ່, ແຕ່ເພິ່ນບໍ່ໄດ້ຖືນຳຄວາມປາກຫລາຍຂະຫຍາຍຫ່າງຂອງຊາວເມືອງນັ້ນເລີຍ. ເຖິງແມ່ນວ່າ ລະມັ່ງຂອງຄະນະກາຍຍະສິນຫາກເກີດພະຍາດອາບເຕີ ແຕ່ມັນກໍບໍ່ເຫັນຊິມີຫຍັງກ່ຽວພັນກັບອາການເຈັບເປັນຂອງຄຸນພໍ່ ອີແອເຣມີອາ ແລະຄົນເຈັບອື່ນໆອີກສາມຄົນນັ້ນເລີຍ. ຄວາມອາດສາມາດຕໍ່ການສຳພັດຂອງມະນຸດຕໍ່ພະຍາດອາບເຕີ ເວົ້າລວມແລ້ວບໍ່ສູງພໍເທົ່າໃດ. ແຕ່ມື້ນີ້ ທ່ານຫມໍສາມາດຢືນຢັນໄດ້ວ່າ, ເຖິງແມ່ນຮູບຮ່າງພາຍນອກຂອງຜູ້ປ່ວຍສີ່ຄົນນີ້ຈະມີລັກສະນະແຕກຕ່າງກັນຫລາຍຢ່າງກໍຕາມ ແຕ່ມັນກໍມີອັນຄືກັນໃນດ້ານພື້ນຖານຄື: ການປ່ຽນໂຄງຮ່າງຂອງໃບຫນ້າ ຊຶ່ງເປັນສາເຫດເຮັດໃຫ້ມະນຸດຈື່ກັນບໍ່ໄດ້.

- ນີ້, ພໍ່ອອກ ຟຣິດ, - ຄຸນພໍ່ອີແອເຣມີອາ ເວົ້າທັງໆທີ່ໄມ້ຈົ້ມແຂ້ວຍັງຄາປາກຢູ່, - ຟັງເດີ. ເຫດເກີດຂຶ້ນຢ່າງກະທັນຫັນຫວ່າງຕອນເຊົ້ານີ້ເອງ. ອັດຕະມາພວມແກ້ຫນວດຢູ່ຕໍ່ຫນ້າແວ່ນ. ທຸກສິ່ງທຸກຢ່າງລ້ວນແຕ່ເປັນມິງຄຸນທັງນັ້ນ. ອັດຕະມາລ້າງຫນ້າດ້ວຍນ້ຳຫອມ ແລະມ້ຽນມັດເຄື່ອງແກ້ຫນວດເຂົ້າກັບ; ບັງເອີນອັດຕະມາເລີຍແຍງແວ່ນອີກເທື່ອຫນຶ່ງ. ເບື້ອງຕົ້ນອັດຕະມາຄຶດວ່າ ຕົນຫລິງຕີແວ່ນບໍ່ ຈຶ່ງເຮັດໃຫ້ແວ່ນແຕກອອກ. ແຕ່ຕົວຈິງແລ້ວແມ່ນຫນ້າຂອງອັດຕະມານີ້ທີ່ປ່ຽນຮູບໄປ. ປານກັບວ່າມີຝາມືອຸບາດອັນໃດອັນຫນຶ່ງມາບິດໂຄງແຂ້ວຂອງອັດຕະມາໄປຂ້າງຫນຶ່ງນີ້ແຫລະ. ອັດຕະມາກົດກະດິງເອີ້ນ ນາຍເກົແລ້ວກໍນອນລົງເທິງຕຽງນີ້. ພໍໄດ້ຂ່າວວ່າອັດຕະມາບໍ່ສະບາຍ, ພວກແມ່ອອກທີ່ເຫລື້ອມໃສໃນສາສະຫນາເຫລົ່ານັ້ນກໍແຫ່ກັນມາຢ່າງກະທັນຫັນພ້ອມດ້ວຍປຶ້ມຄຳພີອະທິຖານແລະເຄື່ອງຕ້ອນຂອງຝາກຕ່າງໆ. ພໍ່ອອກຫມໍເອີຍ, ຊ່ວຍອັດຕະມາແດ່! ອັດຕະມາຊິນເຄີຍກັບໃບຫນ້າຂອງອັດຕະມາແລ້ວ, ແລະພວກແມ່ອອກເຫລົ່ານັ້ນກໍຈື່ຈຳມັນໄດ້ດີ. ເປັນການຍາກທີ່ຊຸມແມ່ອອກນັ້ນຈະທົນຟັງການກ່າວທຳມະເທດສະຫນາຈາກຄົນຜູ້ທີ່ເຂົາເຈົ້າບໍ່ຮູ້ຫນ້າ. ອັດຕະມາເຂົ້າໃຈຈິດຕະສາດຂອງເຂົາເຈົ້າດີ, ແລ້ວພໍ່ອອກກໍຈົ່ງເຂົ້າໃຈຈິດໃຈຂອງອັດຕະມາດ້ວຍ.

- ຜູ້ຂ້າຢາກລົງເລິກກ່ຽວກັບຄວາມເປັນຈິງຂອງບັນຫານີ້, - ທ່ານຫມໍຟຣິດເວົ້າ. - ຕາມ

ຄວາມເຫັນຂອງຄຸນພໍ່ ແລ້ວການເກີດພະຍາດ ... ປ່ຽນຮູບຮ່າງນີ້ອາດສາມາດເລີ່ມມາຈາກໃສນໍ້?

ຄຸນພໍ່ ອີແອເຣມີອາ ມີອາການຄັ້ນຄິດ:

- ອັດຕະມາບໍ່ສາມາດຈະຮູ້ໄດ້...ມື້ວານນີ້...ມື້ວານນີ້ເປັນຈັ່ງໃດນໍ? ມັນກໍປົກກະຕິດີຢູ່. ແຕ່ແລ້ວ, ເອີ ຟ້າວກ່ອນ, ທ່ານຫມໍ...ບໍ່, ມັນແມ່ນຄວາມຝັນຊື່ໆດອກ...

- ຄຸນພໍ່ລອງເລົ່າຄວາມຝັນນັ້ນມາເບິ່ງດູ! - ທ່ານຫມໍພຣິດສະເຫນີ.

- ມື້ວານນີ້ຄືນກໍາກັບວຽກເຮືອນຂອງອັດຕະມາ ຄືແມ່ອອກຄິວເຢີໄດ້ໄປຢາມພີ່ນ້ອງໃກ້ສິດຂອງລາວທີ່ກູອູນ. - ຄຸນພໍ່ ອີແອເຣມີອາ ເລີ່ມຕົ້ນເລົ່າ. - ອັດຕະມາ ນັ່ງອ່ານບົດເທດສະຫນາທໍາຕ່າງໆຈົນເກືອບຮອດຕອນສັນເຂົ້າເພນ. ພໍຮັບປະທານແລ້ວອັດຕະມາກໍເອົາປຶ້ມມານີ້ ແລະໄຂປະຕູປ່ອງຢ້ຽມອອກ. - ເວົ້າຮອດນີ້ ຄຸນພໍ່ ອີແອເຣມີອາ ກໍເດ່ມືໄປດຶງຜ້າກັ້ງກໍາມະຍີ່ນັ້ນ. - ຄືພໍ່ອອກເຫັນຫັ້ນແຫລະ, ປະຕູປ່ອງຢ້ຽມນີ້ໄຂອອກສູ່ສວນໄດ້. ຢູ່ເຊິ່ງຫນ້ານັ້ນແມ່ນເດີ່ນຫລິ້ນຫມາກໂກຣເກ, ຢູ່ທາງເບື້ອງຂວານັ້ນ ແມ່ນສວນດອກກຸຫລາບ. ເບື້ອງຊ້າຍນັ້ນແມ່ນຕົ້ນໂອກເກົ້າ. ເບິ່ງດູ, ງ່າໃຫຍ່ຂອງມັນເດ່ອອກມາພຽງກັບປ່ອງຢ້ຽມ. ອັດຕະມາອ່ານບົດ "ກ່ຽວກັບຄວາມສໍາລານຂອງການມີຊີວິດ" ຈົບແລ້ວ, ກໍກ່າຍເຄື່ອງນຸ່ງແລ້ວມອດໄຟ. ມີແຕ່ແສງສະທ້ອນຂອງດອກໄຟໃນໂບດເທົ່ານັ້ນທີ່ສາມາດສ່ອງແສງເຂົ້າມານີ້ໄດ້. ຫັ້ນ, ມັນເປັນແບບນີ້ແຫລະ...- ຄຸນພໍ່ ອີແອເຣມີອາ ມອດດອກໄຟ. ແຕ່ຂະນະນັ້ນຫ້ອງນອນຍັງຮຸ່ງແຈ້ງຢູ່ຍ້ອນແສງທີ່ສ່ອງພຸ່ງເຂົ້າມາແຕ່ທາງນອກ. - ອັດຕະມາຮູ້ສຶກຄືຈັ່ງວ່າອັດຕະມາຫາກໍນອນໄປໄດ້ຊົ່ວໂມງຫນຶ່ງເທົ່ານັ້ນ, ນີ້, ຢູ່ເທິງຕຽງຫນ່ວຍນີ້, ນອນອ່ວາຍຫນ້າໄປທາງປະຕູປ່ອງຢ້ຽມ. ບັງເອີນອັດຕະມາເລີຍຕື່ນຍ້ອນມີສຽງງາວ - ງາວ, ຄືກັບສັດນ້ອຍຕົວຫນຶ່ງຄາບເອົາອີສັງໄດ້ນີ້ແຫລະ. ພໍມືນຕາຂຶ້ນ, ອັດຕະມາກໍເຫັນຫມານ້ອຍໂຕຫນຶ່ງພໍເປັນຮ່າງມົວໆ ແລ່ນຜ່ານຂອບປະຕູປ່ອງຢ້ຽມ. ປະກົດວ່າມັນແລ່ນມາຊຸນຈອກເຮັດໃຫ້ບ່ວງຢູ່ໃນຈອກດັງແກ້ງຂຶ້ນບາດຫນຶ່ງ. ອັດຕະມາຍັງຈື່ສຽງນັ້ນໄດ້ດີ. ໃນຂະນະທີ່ ອັດຕະມາພວມຄຶດຕຶກຕອງຢູ່ວ່າຫມານ້ອຍໂຕນັ້ນປີນຂຶ້ນເທິງງ່າຕົ້ນໂອກທີ່ເດ່ມາທາງປ່ອງຢ້ຽມນີ້ໄດ້ດ້ວຍວິທີໃດນັ້ນ, ສັດໂຕນັ້ນກໍອ່ວາຍຫົວມາທາງອັດຕະມາແລ້ວຮ້ອງແມວໆຂຶ້ນ ...

- ຄຸນພໍ່ຢາກເວົ້າວ່າ: ເທົ່ານີ້ເບາະ, - ທ່ານໝໍພຣິດແປງຄວາມ.

- ບໍ່, ພໍ່ອອກ ພຣິດເອີຍ, ບໍ່! ສິ່ງປະຫລາດທີ່ສຸດໃນຄວາມຝັນນີ້ມັນຢູ່ບ່ອນວ່າ ໝາໂຕມັນຮ້ອງແນວໆຄືແນວນັ້ນແລ້ວກໍຫາຍວັບໄປ.

- ແລ້ວຈັ່ງໃດອີກ? - ທ່ານໝໍ ພຣິດຖາມ.

- ຫົວໃຈຂອງອັດຕະມາຕຳເຂົ້າຢູ່ຕຶກໆ. ບໍ່ເຂົ້າໃຈວ່າດ້ວຍເຫດໃດຄວາມຝັນນັ້ນ ຈຶ່ງເຮັດໃຫ້ອັດຕະມາມີຄວາມວິຕົກກັງວົນເກີງພຽງນັ້ນ. ອັດຕະມາຍ່າງໄປທີ່ປະຕູບ່ອງຍັງມ-ທຸກສິ່ງທຸກຢ່າງມີດາງນບຕາມເຄີຍ. ເວົ້າໃຫ້ຖືກແທ້ໆແລ້ວ, ງ່າຕົ້ນໂອກພຽງແຕ່ຕີງເລັກນ້ອຍເທົ່ານັ້ນ.

- ຫລັງຈາກນັ້ນ ຄຸນພໍ່ເຮັດຫຍັງແດ່?

- ຫລັງຈາກນັ້ນຫວະ? ກໍຄືໄດ້ເວົ້າມານັ້ນແລ້ວ, ອັດຕະມາເກີດມີອາການກະຕຸ້ນຕື່ນແລະດື່ມນໍ້າໃນຈອກນັ້ນເຂົ້າໄປອີກໆຈົນເສັດອ່ອຍຫ່ອຍ.

- ຈອກນໍ້າທີ່ວາງໄວ້ຢູ່ຂອບປະຕູບ່ອງຍັງມນັ້ນຫວະ?

- ແມ່ນແລ້ວ, ເປັນຫຍັງລະ?

- ບໍ່ເປັນຫຍັງດອກ, ຂໍໂທດທີ່ຫລົງຕັດບົດຄຸນພໍ່ໄປ. - ທ່ານໝໍພຣິດເວົ້າສືໄວໆ. - ນໍ້າຢູ່ໃນຈອກຫັ້ນມີລົດຊາດແນວໃດ?

- ບໍ່ມີລົດຊາດພິເສດຫຍັງດອກ. ອັດຕະມາບໍ່ດື່ມນໍ້າທ່າ. ແມ່ອອກ ຄິວເຢີ ໄດ້ຕົ້ມນໍ້າໄວ້ໃຫ້. ແລ້ວອັດຕະມາກໍອັດປ່ອງຍັງມ, ປ່ອຍຜ້າກັ້ງລົງແລະເຊືອບຫລັບໄປ.

- ເທົ່ານັ້ນຫວະ? - ທ່ານໝໍ ພຣິດຖາມດ້ວຍສຽງຜ່າວໆ.

ມີສຽງປາກຂອງຜູ້ຍິງດັງກ້ອງເຂົ້າມາ ແຕ່ເບື້ອງນອກປະຕູ ຄຸນພໍ່ ອິແອເຣມີອາ ຊຶມຊາບຂຶ້ນດ້ວຍຄວາມວິຕົກ:

- ເປັນຈັ່ງຊັ້ນແຫລະ, ແມ່ອອກນັ້ນໃດຫັ້ນ!

ຕາຂອງທ່ານໝໍມີແວວກັງວົນແດ່ເລັກນ້ອຍ.

- ໃຜ?

ຄຸນພໍ່ ອິແອເຣມີອາ ໂບກມືປະຕິເສດດ້ວຍທ່າທາງເບື່ອໜ່າຍ, ຈົນເກືອບຈະວ່າສິ້ນຫວັງ.

-ແມ່ອອກ ຄິວເຢີ. ບາງທີນາຍເກີ ອາດຈະຕີສາຍບອກໃຫ້ແມ່ອອກນັ້ນຮູ້ກ່ຽວກັບອາການເຈັບປ່ວຍຂອງອັດຕະມາ, ແລ້ວແມ່ອອກກໍຟ້າວລີວມາໂລດ. ມອດໄຟສາ, ພໍ່ອອກ ຟຣິດທີ່ຮັກແພງເອີຍ.

ໃນຄວາມມືດພໍຄືວນີ້ວນັ້ນ ຄຸນພໍ່ ອີແອເຣມີອາ ຟ້າວປີນຂຶ້ນຕຽງນອນ. ຢູ່ນອກປະຕູມີສຽງກຳປັ້ນຕີບປະຕູຢູ່ນີ້ນໍ່າ. ທ່ານຫມໍຟຣິດງົມງາວງຢູ່ໃນຫ້ອງເພື່ອຊອກຫາຫີບຢາ, ເພາະເພິ່ນຈື່ບໍ່ໄດ້ແລ້ວວ່າຕົນວາງມັນໄວ້ໃສ.

-ເອີ, ອັດຕະມາຫົ່ມຜ້າປົກຫົວແຈບດີແລ້ວ, -ຄຸນພໍ່ ອີແອເຣມີອາ ທັງຄວນຄາງທັງຕີງຄີງຢູ່ເທິງເສື່ອ. -ພໍ່ອອກກະລຸນາໄປໄຂປະຕູໃຫ້ແມ່ອອກນັ້ນເຂົ້າມາແດ່. ອັດຕະມາຫວັງວ່າອາການປ່ຽນໂສມນີ້ຈະສາມາດຊ່ວງເຊົາຢູ່ຕີເບາະ?

ທ່ານຫມໍງົມໄປພົບຫີບຢາ.

-ລະບົບການກິນດື່ມ, ລະບົບພັກຜ່ອນຢ່ອນກາຍແລະດື່ມນໍ້າກົ່ນປະສົມ. -ເພິ່ນຕອບດ້ວຍຄວາມຫວາງຫາດ. -ຂ້າແດ່ພະຄຸນພໍ່ຫລວງ, ນັບຕັ້ງແຕ່ຍຸກຂອງ ຮິໂປກຣາດ ມານີ້, ຢາວິເສດສາມຊະນິດນີ້ບໍ່ເຄີຍຮູ້ຈັກກັບຄຳວ່າການປະລາໄຊແມ່ນຫຍັງເລີຍ. -ທ່ານຫມໍຫັນກຸນແຈປະຕູອອກ. -ນາງຄິວເຢີເຊີນເຂົ້າໄປໄດ້ແລ້ວ.

ນາງກໍາກັບວຽກເຮືອນຂອງຄຸນພໍ່ ອີແອເຣມີອາທີ່ພວດພາດເຂົ້າໄປໃນຫ້ອງທັງໆທີ່ຍັງບໍ່ທັນໄດ້ປົດແພປົກຫົວອອກຈາກຫມວກຊ້ຳ.

-ມີຫຍັງຮ້າຍແຮງບໍ່ທ່ານຫມໍ? ເປັນຫຍັງທ່ານຈຶ່ງໃສ່ໄລປະຕູ?

-ຄຸນພໍ່ ອີແອເຣມີອາ ທີ່ເຄົາລົບ ເມື່ອຍແດ່ເລັກນ້ອຍຍ້ອນພາລະກິດຮັບໃຊ້ມວນມະນຸດ, -ທ່ານຫມໍຟຣິດຕອບຢ່າງເຂັ້ມຂຸ້ນ. ບັນດາແນວຄິດ, ຄຸນສົມບັດແລະປັດສະຍາທີ່ສຳຄັນທີ່ພະຄຸນພໍ່ພວມສຸມຈິດສຸມໃຈຄົ້ນຄິດຢູ່ນັ້ນ ມັນຮຽກຮ້ອງຫ້າມບໍ່ໃຫ້ໃຜເຂົ້າມາລົບກວນເພິ່ນ. ແມ່ນແລ້ວ, ນັບທັງເຈົ້ານຳອີກ, ນາງຄິວເຢີເອີຍ. ພວກເຮົາອອກໄປຫ້ອງເຮັດວຽກພຸ້ນເທາະ. ຂ້ອຍຈະຂຽນບົງສັ່ງຢາໃຫ້.ແລ້ວເຈົ້າຈົ່ງປະຕິບັດຕາມຄຳສັ່ງຕ່າງໆຂອງຂ້ອຍ.ແລະກໍຕ້ອງຫຸບປາກນຳອີກດ້ວຍ. ຄຸນພໍ່ທີ່ເຄົາລົບພວມທ່ອງບົດພະຄຳພີອະທິການແລະພະຄຸນພໍ່ຈະຈື່ມມັນໃຫ້

24/VII ห้ามจำหน่าย

ໄດ້ຈິນຂຶ້ນໃຈ. ການຈະປ່ອຍໃຫ້ຄົນທາງນອກເຂົ້າມາຢ້ຽມນັ້ນເຫັນວ່າເປັນເລື່ອງທີ່ບໍ່ຈຳເປັນເລີຍ.

- ທ່ານດີຫລາຍ, ທ່ານໝໍ! - ນາງຄິວເຢີເວົ້າຢຸດໆຢ່ອນໆ.

ທ່ານໝໍຟຣິດກັບເມືອເຮືອນຢ່າງບໍ່ຟ້າວບໍ່ຟັ່ງ. ທັງຄັ້ນຄຶດແລະອຶດອ່ອນ. ເປັນຄັ້ງທຳອິດໃນຊີວິດແພດຂອງທ່ານທີ່ໄດ້ພົບກັບກໍລະນີຕ່າງໆເຊັ່ນນີ້. ພວກເຮົາເຄີຍເຫັນຄົນທີ່ມີດັງເຫີນແລະດັງຍາວ, ໜ້າຜາກຕໍ່າແລະໜ້າຜາກສູງ, ສິ່ງຕ່າງໆເຫລົ່ານັ້ນບໍ່ໄດ້ເຮັດໃຫ້ໃຜມີຄວາມວິຕົກກັງວົນຍ້ອນເລີຍ. ແຕ່ຖ້າບັງເອີນ ຄົນດັງເຫີນກາຍເປັນຄົນດັງຍາວຫລືຄາງກະໄຕຂອງຄົນໃດຄົນໜຶ່ງມີການປ່ຽນແປງຮູບຮ່າງໄປຢ່າງກະທັນຫັນເດລະ? ເມື່ອສິ່ງທີ່ເຮົາເຄີຍເຫັນຢູ່ເປັນປົກກະຕິທຳມະດາ, ບັງເອີນມີການປ່ຽນແປງໄປຢາງກະທັນຫັນນັ້ນຍ່ອມເຮັດໃຫ້ເຮົາມີຄວາມວິຕົກກັງວົນໄດ້. ບໍ່ວ່າຕີໂສມໜ້າຂອງທຸກໆຄົນຈະບໍ່ມີການປ່ຽນແປງໄປຕາມການເວລາ? ບໍ່ວ່າຕີຂະນະນີ້ເມື່ອແນມເບິ່ງຊາຍຊະລາອົກພີແລ້ວ ເຂົາເຈົ້າຈະບໍ່ຈື່ຈຳຊາຍໜຸ່ມຄົນໜຶ່ງ ເຊິ່ງສາມສິບປີກ່ອນໜ້ານີ້ເຄີຍໄດ້ມາທຳຄວາມລຶ້ງເຄີຍກັບທ່ານ ຟຣິດ? ແລະບໍ່ວ່າຕີປະຈຸບັນນີ້ເມື່ອແນມເບິ່ງທ່ານໝໍ ຟຣິດຕຸ້ຍມຸດຫລຸດ, ດັງແດງທີ່ມີເອັນຂຽວພູເຕັມຫລັງມືນັ້ນ, ແລ້ວຈະບໍ່ມີໃຜຈື່ຈຳຊາຍໜຸ່ມນັກສຶກສາຄົນໜຶ່ງໃນເມື່ອກ່ອນໄດ້? ແຕ່ແລ້ວ ເຂົາກໍແມ່ນຄົນໆດຽວ-ຄື ໂຮຣາຊີ ຟຣິດນັ້ນເອງ.

"ໝາຍຄວາມວ່າ, - ທ່ານໝໍຟຣິດໄດ້ສະຫລຸບຄວາມກ່ຽວກັບລັກສະນະປ່ຽນແປງກະທັນຫັນນີ້ວ່າເປັນພຽງແຕ່ພາລະບົດບາດຂອງການເວລາເທົ່ານັ້ນ".

## IV

ເຫດການຕ່າງໆເຫລົ່ານັ້ນເກີດຂຶ້ນຢູ່ແອຊູໂອເຣີໃນມື້ດຽວກັນກັບຕອນທີ່ຂ້າພະເຈົ້າພວມງົມຊອກຫາຫີນທາງອອກຢູ່ໃຕ້ພື້ນບໍ່ງວງຍາວ. ຂະນະນີ້ ຂ້າພະເຈົ້າພວມຍືນຢູ່ຕໍ່ໜ້າ ໝໍນາຍພານນິກຄົນນັ້ນ.

- ວານດິກ ຫວະ? - ຂ້າພະເຈົ້າ ຖາມແລະເງືອດກຳປັ້ນທັງສອງເບື້ອງຂຶ້ນ.

ມັນແມ່ນເລື່ອງປະຫລາດຢ່າງທີ່ເຊື່ອໄດ້ຍາກ. ແຕ່ນາຍພານນິກໄດ້ກ່າວຍ້ຳຄືນເຖິງການ

ພົບປະກັນໃນຕອນຕ່າງໆທີ່ອຸທິຍານຂອງ "ສາດສະດາຈານງູ" ແລະການຂຶ້ນສານທີ່ຮັງກູນ , ຊຶ່ງເຮັດໃຫ້ຂ້າພະເຈົ້າບໍ່ມີຫຍັງຈະສົງໄສອີກ. ແມ່ນ, ນີ້ແມ່ນ ວານດິກ ອີຫລີ! ຂະຫນາດຕົວຂອງມັນນ້ອຍລົງກ່ວາເກົ່າ, ແຕ່ຖ້າເອົາໃຈໃສ່ເບິ່ງແລະຕັ້ງໃຈຟັງດີໆແລ້ວ, ກໍຍັງພໍທີ່ຈະສາມາດຄົ້ນພົບຮ່ອງຮອຍອັນໃດອັນຫນຶ່ງທີ່ຄ້າຍຄືກັບຫມໍເສຍການພະນັນໃຫ້ຂ້າພະເຈົ້າ ຫນຶ່ງຕອນລ່າທີ່ ແບັນຮັກບໍ ແຕ່ຄາວຮູ້ຈັກກັນໃຫມ່ໆພຸ້ນ.

-ວານດິກ ເຈົ້າປ່ຽນແປງໄປພິລຶກ. -ຂ້າພະເຈົ້າເອີ່ຍຂຶ້ນຫລັງຈາກຟັງຫມໍນາຍພານນິກຄົນນັ້ນເວົ້າຈົບ, -ແຕ່ເຈົ້າກໍຍັງບໍ່ທັນປ່ຽນນິດໃສອັນຊົ່ວຊ້ານັ້ນເທື່ອ ນອກຈາກວາງອຸບາຍຂີ້ລັກແລ້ວ ເຈົ້າຍັງຂ້າສາດສະດາຈານໂຮນເຊີ...

-ເຊົາ ເຍີ, ປົນ, -ວານດິກຕອບຢ່າງເຄັ່ງຂຶມ.

-ຫຸບປາກ, ຍ້ອນເຈົ້ານັ້ນແຫລະ ຂ້ອຍເກືອບຈະໄດ້ນັ່ງຕັ່ງໄຟຟ້າຍ້ອນ ດຽວນີ້ເຈົ້າຊ້ຳມາຢູ່ນີ້ອີກ ບັກຂີ້ລັກງູ, ບັກໂຈນ ກາກເນໂຣ?...

-ປົນ, ທຸ່ນທ່ຽງແດ່ຕິເອີຍ, -ວານດິກ ຕັດບົດຂ້າພະເຈົ້າ. -ຂ້ອຍບໍ່ແມ່ນ ກາກເນໂຣ ແລະກໍບໍ່ໄດ້ຂ້າ ໂຮນເຊີ. ຄຳກ່າວແລະຄວາມສົງໄສຂອງເຈົ້ານັ້ນສອດຄ່ອງເຫມາະສົມທັງນັ້ນ. ຂ້ອຍເອງກໍຢາກຈະເຮັດໃຫ້ບັນຫາຕ່າງໆທີ່ກ່ຽວພັນເຖິງການເຮັດໃຫ້ຂ້ອຍ ແລະເຈົ້າມີການປ່ຽນແປງໄປເຊັ່ນນີ້ກະຈ່າງແຈ້ງຂຶ້ນ. ດ້ວຍເຫດນັ້ນພວກເຮົາຢ່າໄປເວົ້າເຖິງເລື່ອງເປັນຕາຫນ່າຍເຫລົ່ານັ້ນອີກ, ແຕ່ຈະຕ້ອງເຕົ້າໂຮມກຳລັງໃຈຄືນມາ. ນັ່ງລົງດີ ເພື່ອນເກົ່າຂອງເຮົາເອີຍ, ພວກເຮົາຈະປຶກສາຫາລືສະພາບນຳກັນເບິ່ງວ່າມັນເປັນຈັ່ງໃດ.

ພວກເຮົາພ້ອມກັນນັ່ງລົງເທິງຫີນໂງ່ນຫນຶ່ງຢູ່ຂ້າງກອງຟອນຂອງໃຜຄົນຫນຶ່ງ. ແລ້ວວານດິກກໍເລີ່ມເລື່ອງ:

-ປົນ, ຂ້ອຍຫວັງວ່າ, ເພື່ອເປັນການຕອບສະຫນອງການເປີດອົກເປີດໃຈຂອງຂ້ອຍ, ເຈົ້າຈະຮັບຮູ້ດ້ວຍຄວາມຈິງໃຈວ່າສິ່ງທີ່ຂ້ອຍເວົ້າມານີ້ມັນຖືກຕ້ອງ. ບັນຫານີ້ມັນມີຜົນໃຫ້ແກ່ຜົນປະໂຫຍດລວມຂອງເຮົາທັງສອງ. ເຈົ້າຟັງເດີ. ມີບໍລິສັດການຄ້າແຫ່ງຫນຶ່ງທີ່ທຳການຜະລິດແລະຂາຍຢາໄດ້ມອບຫມາຍຫນ້າທີ່ໃຫ້ຂ້ອຍຊອກຄົ້ນຫາສະດາຈານ ມິນໂຮຍເຊີໃດຫນຶ່ງ ແລະຕິດຕາມເບິ່ງການເຄື່ອນໄຫວລາວ. ຂ້ອຍຄິດວ່າບໍລິສັດນັ້ນອາດຈະວິຕົກວ່າ ມິນໂຮຍເຊີຈະ

ຫລອກລວງພາຍຫລັງທີ່ເຂົາໄດ້ຮັບເຫມົາສົ່ງຍອດແຍ້ວັດຖຸເຊິ່ງເປັນພິດງູທີ່ຫາກໍຂຸດຄົ້ນໄດ້ນັ້ນໄປໃຫ້. ເຂົາຈ່າຍຄ່າແຮງງານສຳລັບວຽກງານນີ້ດີທີ່ສຸດ. ແຕ່ລະອາທິດຂ້ອຍຕ້ອງສົ່ງຄຳລາຍງານຜ່ານທາງໄປສະນີຢ່າງເປັນປະຈຳ. ຂ້ອຍສາມາດສຳເລັດຫນ້າທີ່ນີ້ເປັນຢ່າງດີ. ຂ້ອຍຄົ້ນພົບມິນໂຮຍເຊີ ທີ່ນີວຍອກ, ຂະນະນັ້ນລາວພວມທຳການການເຈລະຈາກັບບັນດາບໍລິສັດສິນຄ້າຂາເຂົ້າທີ່ໃຫຍ່ທີ່ສຸດ. ດ້ວຍເຫດວ່າຫນ້າທີ່ຂອງຂ້ອຍ ແມ່ນຕິດຕາມລາວຢ່າງບໍ່ລົດລະ, ດັ່ງນັ້ນຂ້ອຍຈຶ່ງເລີ່ມສະກົດຮອຍຕາມລາວໄປຈົນຮອດ ແບັນຮັກບໍ, ມິນໂຮຍເຊີ ວາງແຜນໄປອາບນ້ຳທະເລ. ຂ້ອຍແນມເຫັນລາວພວມຫລິບເຂົ້າໄປໃນຄື້ນຟອງທະເລ, ແຕ່ໃນຂະນະນັ້ນກໍມີຊາຍຫນຸ່ມຄົນຫນຶ່ງປະກົດຕົວຂຶ້ນແລະມານັ່ງລົງທີ່ຂ້າງຂ້ອຍ ຊຶ່ງເປັນການລົບກວນການຕິດຕາມມິນໂຮຍເຊີທີ່ກຳລັງອາບນ້ຳຂອງຂ້ອຍ.

- ຄົນຜູ້ນັ້ນແມ່ນຂ້ອຍນີ້ຫວະ? -ຂ້າພະເຈົ້າຫລຸດປາກການອອກໄປຢ່າງບໍ່ໄດ້ຕັ້ງໃຈ.

- ບິນ, ເຈົ້າຕວງເກ່ງທີ່ສຸດ, -ວານດິກຕອບ. -ແຕ່ລັກສະນະດ້ານນັ້ນຄືຫນຶ່ງໃນບັນດາລັກສະນະພິເສດທັງມວນຂອງເຈົ້າ. ຈະຕ້ອງຊຸກເຈົ້າຂຶ້ນຮ້ານໂດດເພື່ອລອກຫນັງຄວາມຂີ້ໂມ້ຂີ້ຄຸຍຂອງເຈົ້າອອກ, ປານກັບວ່າເຈົ້າຈະ ຕີລັງກາບິນກາຍນີ້ແຫລະ.

- ແລ້ວຂ້ອຍກໍໂດດໄດ້ອີຫລີ ແລະເຈົ້າເສຍການພະນັນ, ວານດິກ...

- ເອົາເກາະແນະເງິນຫນຶ່ງດອນລ່າຂອງເຈົ້າ, -ມັນທົວເບະສົບອອກ. -ຂ້ອຍກືເງິນຫນຶ່ງດອນລ່າທີ່ເຈົ້າຊະນະການພະນັນໄວ້ໃນກົງເສື້ອນີ້ມາໄດ້ສາມປີແລ້ວ. ແຕ່ ບິນ, ດ້ວຍການໂດດຂອງເຈົ້າ, ເຈົ້າໄດ້ລ້າງຜານວຽກງານຂອງຂ້ອຍໄປຫມົດ. ເຂົາເຈົ້າແລ່ນສົນລະວົນກັນຂຶ້ນທີ່ທ່າອາບ. ກລິບຕິດສ້ອຍຫ້ອຍຕາມເຈົ້າ, ແລ້ວຂ້ອຍກໍແນມເຫັນຮູບໂຄສະນາໃບຕ່າງໆທີ່ແຕ້ມຮູບຂອງເຈົ້າຕິດຢູ່ທີ່ໂຮງກາຍຍະສິນ "ໂກໂລເຊອູມ". ເວລານັ້ນຂ້ອຍເຫັນວ່າເຈົ້າບໍ່ໄດ້ແມ່ນຄົນປາກກ້າສຳຫາວຄືກັບຊາຍຫນຸ່ມຜູ້ທີ່ຂ້ອຍເຄີຍພົບຢູ່ທ່າອາບນ້ຳຫັ້ນ. ແຕ່ບັນຫາຕົ້ນຕໍກໍມີຢູ່ວ່າມິນໂຮຍເຊີ ບໍ່ໄດ້ໂປໂລຫນ້າອອກມາຈາກນ້ຳທະເລເລີຍ.

- ຂ້ອຍຊ່ວຍເອົາລາວໄດ້, -ຂ້າພະເຈົ້າເວົ້າດ້ວຍຄວາມເຄັ່ງຂຶມພ້ອມທັງເກັບມ້ວນເງິນດອນລ່າທີ່ຫຍໍ້ແຫຍ້ແລ້ວນັ້ນເຂົ້າໄປໃນກົງ.

- ແມ່ນຫຍັງເກາະ? -ວານດິກແປກໃຈ.

- ກໍແມ່ນລະດີ, - ຂ້າພະເຈົ້າເວົ້າ. - ຂ້ອຍບໍ່ໄດ້ວ່າຊິໂດດລົງຈາກຮ້ານພິເຜດນັ້ນ ໃຫ້ເຈົ້າດີໃຈດອກ! ແຕ່ຢູ່ເບື້ອງລຸ່ມມີຄົນຜູ້ຫນຶ່ງພວມຈົມລົງພື້ນນ້ຳ, ຂ້ອຍຕ້ອງໄດ້ຊ່ວຍເອົາຄົນຜູ້ນັ້ນຂຶ້ນມາ.

- ແລ້ວເປັນຈັ່ງໃດອີກ?

- ຂ້ອຍກະຊາກພົມລາວຂຶ້ນມາ. ເຮືອນ້ອຍເຫລັ້ມຫນຶ່ງແລ່ນມາແລ້ວນຳເອົາລາວໄປ.

- ຄັນຊັ້ນກໍຫມາຍຄວາມວ່າ ເຈົ້າໄດ້ກະທຳສິ່ງທີ່ບໍ່ຖືກກາລະເທສະອີກແລ້ວ, - ວານດິກເຮັດຫນ້າຫຍຸ້ງເຂົ້າ. - ສິ້ງເສື້ອຂອງ ມິນໂຮຍເຊີ ປະໄວ້ໃນຫ້ອງຂັບ, ບາດແລ້ວກໍມີສາລະວັດຄົນຫນຶ່ງມາເອົາໄປ ເຈົ້າເຂົ້າໃຈດີ? ຂ້ອຍຄົ້ນຫາຊາກສົບຂອງມິນໂຮຍເຊີໃນໂຮງເຍັນຕ່າງໆບໍ່ເຫັນເລີຍ. ເພາະວ່າ, ຖ້າລາວຕາຍດົກນ້ຳ ຈັ່ງໃດກໍຕ້ອງມີສົບຢູ່ບ່ອນນັ້ນ. ແຕ່ບັນດາພະນັກງານໃນຫ້ອງການຂອງບັນດາບໍລິສັດການຄ້າມັກໃບ່ຄວາມລັບອອກມາສະເຫມີ, ດ້ວຍເຫດນັ້ນຂ້ອຍຈຶ່ງຄົ້ນພົບ ມິນໂຮຍເຊີ ຢູ່ໃນຮັງງູຂອງເຂົາ. ເວົ້າສຳລັບພວກເຮົາແລ້ວ, ບ່ອນນັ້ນມັນເປັນດາຫນ່າຍທີ່ສຸດ. ມິນໂຮຍເຊີ ດຳລົງຊີວິດຢູ່ຫັ້ນ, ຄືເຈົ້າຮູ້ຫັ້ນແຫລະ, ແຈບຈົມດີພໍຄວນ. ມີເທື່ອຫນຶ່ງລາວໄປຫລົ້ນທາງໄກ, ພາຍກົງເປ້ທີ່ບ່າ. ເລື່ອງນີ້ມັນເຮັດໃຫ້ຂ້ອຍຕ້ອງເອົາໃຈໃສ່, ແລະຂ້ອຍກໍໄດ້ຕິດຕາມລາວຢູ່ໃນໄລຍະຫ່າງໆ. ແຕ່ປິນເອີຍ, ເຈົ້າລອງຄຶດເບິ່ງດູວ່າ, ລາວຫມັ້ນເຂົ້າປ່າດົງຍັງບໍ່ພໍຍັງຫມັ້ນເຂົ້າໄປໃນຫມູ່ບ້ານຊຶ່ງພະຍາດກາລະໂລກພວມລະບາດຢູ່. ຈັ່ງແມ່ນອະເຫຍືອງຄືງ, ດີແຕ່ພວກທະຫານຍາມກີດກັ້ນຂ້ອຍໄວ້ແລະໄລ່ຫນີໄປ. ຂ້ອຍຍັງຈື່ໄດ້ວ່າ, ເວລານັ້ນ ຂ້ອຍມີຄວາມຮູ້ສຶກອັນຫນັກໃຈທີ່ສຸດ. ຂ້ອຍຮູ້ສຶກລຳຄານໃຈເປັນພິເສດເມື່ອຄຶດວ່າ ມິນໂຮຍເຊີ ຕາຍໄປໃນບ້ານນັ້ນແລ້ວ. ທະຫານຊຸ້ນສອງ ໂບໂຣໄດ້ໃຫ້ຂ່າວອັນແນ່ນອນວ່າ ຄົນພາຍກົງເປ້ຜູ້ນັ້ນພະຍາຍາມເອົາຕົວລອດອອກມາຈາກຫມູ່ບ້ານທີ່ເກີດພະຍາດກາລະໂລກ, ແຕ່ປືນສອງສາມນັດທີ່ຍິງຂຶ້ນຟ້າໄດ້ບັງຄັບໃຫ້ລາວກັບຄືນໄປ, ແລະແຜ່ນເຈ້ຍທີ່ຕິດໄປນຳລູກທະນູນັ້ນໄດ້ເປັນສິ່ງເຕືອນບອກໃຫ້ລາວຕຽມ ພ້ອມຕ້ອນຮັບເອົາວິນາທີສຸດທ້າຍແຫ່ງຊີວິດຂອງລາວ.

ເລື່ອງ ວານດິກ ເລົ່າຖືກຕາມຄວາມຈິງທຸກຢ່າງ, ຂ້າພະເຈົ້າໄດ້ຕົກລົງໃຈບໍ່ຕັດຄວາມຂອງຫມໍ.

-ຂະນະນັ້ນ, ປິນ, ເຈົ້າລອງຄິດເບິ່ງດູວ່າຂ້ອຍແປກໃຈເຖິງພຽງໃດ ເມື່ອເຂົ້າໄປໃນຄ້າຍງູດ້ວຍລັກສະນະຂອງຄົນຂາຍງູນັ້ນ, ຂ້ອຍຊ້ຳພົບ ມິນໂຣຍເຊີ ຍັງແຂງແຮງດີຢູ່. ລາວອອກຄຳສັ່ງໃຫ້ຄົນຊ່ວຍວຽກຂອງຕົນຄື ນາງ ລີເຢີ ຈ່າຍເງິນຄ່າງູໂຕລະສາມຫລຽນໃຫ້ຂ້ອຍແລະເວົ້າເພື່ອໃຫ້ຂ້ອຍຫນີໄປ. "ພວກເຮົາມີງູ ເດີຢີເຣີ ພໍໃຊ້ຈົນຮອດລະດູໃບໄມ້ຫລົ່ນ, ເອົາລະ, ເຈົ້າບໍ່ຕ້ອງຫາຈັບອີກເດີ", -ນາງ ລີເຢີ ປະກາດກັບຂ້ອຍ ເຊັ່ນນັ້ນ, ປິນ, ເຈົ້າຍັງຈື່ໄດ້ດີ, ຕໍ່ຫນ້ານາງ, ເຈົ້າໄດ້ແຕ່ຫມອບຢູ່ສະເຫມີ. ແຕ່ເຖິງຈັ່ງໃດໄດ້ ຂ້ອຍກໍຕ້ອງຕິດຕາມທຸກການເຄື່ອນໄຫວຂອງ ມິນໂຣຍເຊີ...,ນະ, ປິນເອີຍ, ເຈົ້າຍັງບໍ່ທັນໄດ້ຢູ່ໃນຖານະນັກທຸລະກິດທາງຂອງວົງການຄ້າຂາຍຈັກເທື່ອ, ບາງໂອກາດຄົນປະເພດນີ້ຈະຕ້ອງມີຄວາມຮອບຮູ້ກ່ຽວກັບການງານທຸກຢ່າງຢ່າງຮອບດ້ານຄືແນວໃດ. ແຕ່ກ່ອນ, ຄາວຍັງນ້ອຍ, ຂ້ອຍເຄີຍດຳລົງຊີວິດຢູ່ ຍືອາວາ ດົນພໍຄວນ. ຢູ່ແຫ່ງນັ້ນພໍ່ຂອງຂ້ອຍເຮັດວຽກຢູ່ໃນສວນຫມາກໄມ້ແຫ່ງຫນຶ່ງ. ປິນ, ຢູ່ນັ້ນຈັ່ງແມ່ນສະຫວັນແທ້ຂອງທຳມະຊາດ! ຂ້ອຍໃຝ່ຝັນຢາກຈະກັບຄືນໄປຫັ້ນອີກຈັກຄັ້ງ. ກ່ອນນີ້, ຂ້ອຍແລະຫມູ່ເພື່ອນຮຸ່ນຮາວຄາວດຽວກັນຈັບງູເກັ່ງຂະຫນາດ, ແລ້ວສິ່ງນີ້ມັນກໍເປັນຜົນດີໃຫ້ແກ່ຂ້ອຍ ເມື່ອຄາວຢູ່ທີ່ຣັງກູນ. ຂ້ອຍຄິດຫາວິທີຈັບງູ ເດີຢີເຣີຂອງ ມິນໂຣຍເຊີ ແລ້ວເອົາໄປຂາຍໃຫ້ລາວອີກ. ຂ້ອຍຖືວ່າຈະບໍ່ເສຍໄຊໃນເກມຫລິ້ນນີ້ເປັນແນ່. ແຕ່ຂ້ອຍຊ້ຳປະເຊີນຫນ້າກັບເຈົ້າຢູ່ທີ່ ອຸທິຍານ, ແລ້ວບັນຫານັ້ນມັນເຮັດໃຫ້ຈຸດປະສົງຂອງຂ້ອຍສັບສົນຂຶ້ນ. ແຕ່ແລ້ວເຈົ້າກໍເປັນຄົນຜູ້ຫນຶ່ງທີ່ມັກຟັງເລື່ອງມ່ວນຫູຕ່າງໆເປັນຍິ່ງແລະຮັບເອົາຜົນສະທ້ອນຈາກຜູ້ອື່ນໄດ້ງ່າຍ. ດ້ວຍເຫດນັ້ນ, ຍ້ອນການຊິດຊ່ວຍຂອງເຈົ້າ ຂ້ອຍຈຶ່ງຮູ້ແຈ້ງວ່າ ມິນໂຣຍເຊີໄດ້ອອກໄປພ້ອມກັບຫລານຂອງລາວຄື ໂຣນເຊີ. ຈົນກະທັ້ງບັດນີ້ ຂ້ອຍກໍຍັງຂອບໃຈນຳເຈົ້າໃນເລື່ອງນີ້ຢູ່.

-ຊິມີຫຍັງຫວະ ... ຕອນນັ້ນສິ່ງນີ້ມັນເຮັດໃຫ້ຂ້ອຍເຈັບຊ້ຳທີ່ສຸດ, ແຕ່ດຽວນີ້ມັນຊິມີຄວາມຫມາຍອີ່ຫຍັງອີກ. ເຈົ້າກໍໄດ້ຊ່ວຍຂ້ອຍດ້ວຍຕາງິວເກີກຂອງເຈົ້າ, -ຂ້າພະເຈົ້າເວົ້າ.

-ປິນ, ເລື່ອງມະລຶດປິດປີ່ເຫລົ່ານັ້ນມັນຊິມີລັກອີ່ສັງ. ຄຸນໂທແທນຄຸນນັ້ງເທົ່ານັ້ນດອກ. ຄົນຜູ້ທີ່ນຳຕົວເຈົ້າອອກຈາກຣັງກູນນັ້ນມັນແມ່ນເຈົ້າຂອງຫ້ອງທີ່ຂ້ອຍເຊົ່ານັ້ນຊື່ງດອກ. ລາວເປັນຄົນທີ່ຕຽມພ້ອມເພື່ອຊົດຊ່ວຍຜູ້ອື່ນ. ກໍແມ່ນລາວເອງໄດ້ຊຸກເຊື່ອງຂ້ອຍ ໃນຂະນະທີ່ຂ້ອຍ

ພວມພ້າວຫລົບຫນີໄປຈາກທ່ານຜູ້ພິພາກສາ. ແຕ່ພວກເຮົາອອກນອກເລື່ອງສາແລ້ວ. ຜ່ານຈາກເຈົ້າ ຂ້ອຍຮູ້ຈັກ ມາຊາດລານ ແລ້ວຂ້ອຍກໍໄປແຫ່ງນັ້ນເພື່ອຊອກຫາໂຣນເຊີ. ຂ້ອຍແນ່ໃຈວ່າຜ່ານຈາກເພິ່ນຜູ້ນີ້ ຂ້ອຍຈະຮູ້ແຈ້ງວ່າ ມິນໂຣຍເຊີ ບິນໄປໃສ. ແຕ່ນັກທຸລະກິດກາງຄືຂ້ອຍອາໃສມີຊີວິດຢູ່ກັບວຽກງານທີ່ເຂົາເຈົ້າມອບຫມາຍໃຫ້. ແລ້ວ, ປົນເອີຍ, ຈັ່ງແມ່ນເປັນຕາເຫລືອໃຈໃນເມື່ອວຽກງານຫນຶ່ງທີ່ພວມຈະນຳໂຊກລາບມາໃຫ້ເຈົ້າກັບຫລຸດມືໄປຢ່າງກະທັນຫັນ. ຫລັງຈາກນັ້ນ, ຈະຕ້ອງສາລະພາບວ່າ, ເລື່ອງນີ້ມັນຊຸບເກີງຄວາມໂມໂຫຂອງຂ້ອຍອີກເທື່ອຫນຶ່ງ. ຫົນທາງອັນຍາວໄກຂ້ອຍກໍຍັງບໍ່ຫວັ່ນຊີມີຫັຍງອັນສໍ່າແຜ່ນດິນ ແມັກຊິກຮ້ອນແຜດນັ້ນ. ທີ່ ມາຊາດລານ ເຂົາເຈົ້າໄດ້ຊີ້ບອກເຮືອນຂອງ ໂຣນເຊີ ໃຫ້ຂ້ອຍຮູ້, ແລ້ວທ່ານ ສາດສະດາຈານຄົນນັ້ນກໍຕ້ອນຮັບເອົາຂ້ອຍໄວ້ເປັນຄົນໃຊ້ຢູ່ໃນເຮືອນ, ຍ້ອນວ່າຂ້ອຍໄປຫາເພິ່ນດ້ວຍການສວມບົດບາດເປັນຄົນຂໍທານຜູ້ອາພັບອັບຈົນຄົນຫນຶ່ງ ກ່ອນນີ້ຂ້ອຍບໍ່ເຄີຍໄດ້ພົບລາວຈັກເທື່ອ; ກ້າເບິ່ງລາວຄັກໆແລ້ວ ປະກົດວ່າລາວກໍມີບາງຢ່າງທີ່ຄ້າຍຄືກັບ ອາວ ມິນໂຣຍເຊີຂອງລາວ. ບັນຫາຂອງມັນມີຢູ່ວ່າ ປ້ອງຄໍຂອງລາວບໍ່ຄ່ອຍຈະປົກກະຕິ ແລະລາວກໍເຄີຍໄອຢູ່: ອະຮື່...ອະຮື່...ລາວສູບຢາຕວກກີບິນກັບຢາ ມາດູຣາ. ຂ້ອຍຊິນເຄີຍກັບກິ່ນຢາຊະນິດນັ້ນດີ. ໂຣນເຊີ ວາງເງື່ອນໄຂໃຫ້ຂ້ອຍສອງຢ່າງ: ບໍ່ໄດ້ອອກເຮືອນໄປໃສແລະບໍ່ໄດ້ແກຸຫນວດ. ເລື່ອງນີ້ພາໃຫ້ເຈົ້າແປກໃຈແມ່ນຫວະ? ຂ້ອຍກໍແປກໃຈຕໍ່ນິດໄສພິດສະດານນັ້ນ. ແຕ່ກ້າຄົນຜູ້ຫນຶ່ງມີເງິນແລະສາມາດຫາວຽກເຮັດງານທຳໃຫ້ແກ່ເຈົ້າແລ້ວ ເຂົາເຈົ້າກໍຍ່ອມມີສິດກະທຳສິ່ງປະຫລາດຕ່າງໆນາງໄດ້. ໂຣນເຊີຂໍຮ້ອງບໍ່ໃຫ້ຂ້ອຍແກຸຫນວດ! ລາວຈະແກຸໃຫ້ເອງເມື່ອລາວຕ້ອງການ.

- ອະຮື່, ອະຮື່... - ຂ້າພະເຈົ້າໄອແລະຄຶດເຖິງ ໂດບີ, ຂ້າພະເຈົ້າຖາມ:

- ນອກນັ້ນ, ຢູ່ໃນເຮືອນຂອງທ່ານ ໂຣນເຊີບໍ່ມີແວ່ນ ພໍປ່ງອີກແມ່ນບໍ່ ?

- ຈັ່ງໃດເຈົ້າຈຶ່ງຮູ້? - ວານດີກ ຫີບຕາແນມເບິ່ງຂ້າພະເຈົ້າດ້ວຍຄວາມລະແວງ. - ຮູ້ລະຕິຄວາມຈິງມັນເປັນເຊັ່ນນັ້ນ. ເອົາລະ, ຂ້ອຍເຫັນພ້ອມກັບເງື່ອນໄຂທຸກຢ່າງເຫລົ່ານັ້ນ ແລ້ວວັນເວລາເຫລົ່ານັ້ນຂອງຂ້ອຍກໍລ່ວງເລີຍໄປຢ່າງມີດາງບ. ເຂົາເຈົ້າເອົາອາຫານຈາກຫ້ອງອາຫານຂຶ້ນມາໃຫ້ພວກເຮົາ, ເຖິງແມ່ນຂ້ອຍບໍ່ມັກກິນອາຫານ ແມັກຊິກ ຈັກດີເລີຍກໍຕາມ. ຢູ່

ຫັ້ນແມ່ນຫຍັງໆກໍຈືນໃສ່ນ້ຳມັນພືດຫມົດທຸກຢ່າງ. ບິນ, ແຕ່ຂ້ອຍກໍສາບານວ່າ ຍາມໃດກໍຕຽມພ້ອມຂອບໃຈນຳໂຊກຊາຕາທີ່ໄດ້ຊັກຈູງເອົາຂ້ອຍໄປສູ່ຝັ່ງອັນນຸ່ມນວນນັ້ນຢູ່ສະເຫມີ. ຫລັງຈາກຈັດແຈງຫ້ອງຕ່າງໆສຳເລັດແລະກິນອາຫານທ່ຽງແລ້ວ, ຂ້ອຍກໍອີ່ມແປະອີ່ມແປ້ ແລະນອນຢຽດຕົວຢູ່ໃນຫ້ອງຂອງຕົນຢູ່ຊັ້ນລຸ່ມ, ເຈົ້າຮູ້ຈັກຫ້ອງນັ້ນແລ້ວ ...

- ແມ່ນ, ຮູ້ດີທີ່ສຸດແລ້ວແຫລະ, - ຂ້າພະເຈົ້າຕອບດ້ວຍນ້ຳສຽງເຍາະເຍີ້ຍ. - ພໍແລ້ວວານດີກບໍ່ຕ້ອງເວົ້າກ່ຽວງວງຽນໆຢູ່ນີ້ອີກດອກ...

- ພໍ່າເອີຍ, ຂ້ອຍຊິໄດ້ເວົ້າກ່ຽວງວງຽນໆຢູ່ໃສ, ຂ້ອຍພວມເລົ່າເຫດການຕ່າງໆຄືນມາໂດຍຫຍໍ້ຢ່າງລັດເຈນທີ່ສຸດຕ່າງຫາກ! ໂຮນເຊີນັ່ງຂຽນຫນັງສືຢູ່ໃນຫ້ອງຂອງຕົນທີ່ຊັ້ນເທິງຢູ່ຕະຫລອດມື້, ສ່ວນຂ້ອຍ, ເຈົ້າຮູ້ບໍ່, ຈະຕ້ອງເຮັດວິທີໃດວິທີຫນຶ່ງເພື່ອຈະໄດ້ຮູ້ຂ່າວຄາວກ່ຽວກັບອາວຂອງລາວ ແລ້ວກໍຈະອອກເດີນທາງໄປເສື່ອມຍິງຄວາມລົ້ງເຄີຍທີ່ມີມາແລ້ວນັ້ນ. ໂຮນເຊີ ມີຈຸດພິເສດຄືບໍ່ມັກໂອ້ລົມກັບໃຜ. ຂ້ອຍໄດ້ການເກັງອາວມິນໂຮຍເຊີຂອງລາວຢ່າງລະມັດລະວັງ, ໄດ້ຕິດຕາມຈົດຫມາຍຕ່າງໆທີ່ສົ່ງມາ, ແຕ່...ບິນເອີຍ, ຈັ່ງແມ່ນໂຊກບໍ່ດີ! ຄວາມຈິງ, ເຂົາເຈົ້າໄດ້ທຳການຕິດຕໍ່ນຳກັນດ້ວຍກົດລັບທີ່ປະກາດລົງໃນຫນ້າຫນັງສືພິມຕ່າງໆ, ແລະ ໂຮນເຊີກໍມີແຕ່ຮັບຫນັງສືພິມເທົ່ານັ້ນ. ແຕ່ຂ້ອຍຊິເຮັດຫຍັງໄດ້ໃນສະພາບທີ່ຖືກກັກຂັງຢ່າງບໍ່ມີທາງແກ້ໄຂນີ້ ແມ້ແຕ່ຢາກຈະປ່ອນບັດໄປສະນີເຂົ້າໃສ່ຕູ້ໄປສະນີ ກໍຍັງເຮັດບໍ່ໄດ້ຊ້ຳ! ໂຮນເຊີ ໄດ້ແກຫນວດໃຫ້ຂ້ອຍ ພາຍຫລັງທີ່ເຮັດວຽກມາແລ້ວຫນຶ່ງເດືອນ, ພາຍຫລັງທີ່ຫນວດຄາງກະໄຕຂອງຂ້ອຍໄດ້ປົ່ງຍາວຊວາກລວກອອກມາແລ້ວ. ທຳອິດຂ້ອຍໃຈດີກຫວຳໆຢູ່ເພາະເປັນຫ່ວງນຳຫູຂອງຕົນ. ແຕ່ສາດສະດາຈານ ໂຮນເຊີ ໄດ້ສະແດງຝີມືອອກມາໃຫ້ເຫັນວ່າລາວເປັນຊ່າງຕັດຜົມປີຊາສາມາດທັງເປັນຊ່າງແກຫນວດຜູ້ຊຳນິຊຳນານຍິ່ງ. ເປັນອັນວ່າເວລາໄດ້ລ່ວງເລີຍໄປເກືອບສີ່ເດືອນແລ້ວ. ມື້ຫນຶ່ງ, ເປັນຍາມເຊົ້າ, ຫລັງຈາກຕື່ນນອນ ຂ້ອຍແປກໃຈທີ່ສຸດຍ້ອນຄວາມມິດງຽບອັນແປກປະຫລາດຢູ່ໃນເຮືອນ. ບໍ່ໄດ້ຍິນສຽງບາດຕີນຂອງໂຮນເຊີ ດັງຢູ່ຊັ້ນເທິງອີກ. ຕາມປົກກະຕິແລ້ວລາວມັກຍ່າງແອບກາຍຢູ່ໃນຫ້ອງເຮັດວຽກໃນຍາມພັກຜ່ອນຊົ່ວຄາວ. ແລ້ວກໍບໍ່ໄດ້ຍິນສຽງກະດິງລາວເອີ້ນຄືຢູ່ມື້. ບາດນັ້ນຂ້ອຍຈຶ່ງຂຶ້ນເມືອຊັ້ນເທິງ...ພວກ

ເຮົາສູບຢາກ່ອນປິນ, ຂ້ອຍມີຢາ ມາດູຣາ ຢູ່ເລັກນ້ອຍ, ໄດ້ປົນຢາເສັ້ນແຫ້ງໃສ່ໃຫ້ມັນປຸກຕື່ມ. ຮໍາຢາແນະ, ປິນ...

ວານດິກຢຸດເລົ່າເພື່ອເຊື້ອເຊີນຂ້າພະເຈົ້າສູບຢາ.

ພາຍຫລັງທີ່ສູບຢາບິກຍາວໆເຂົ້າໄປແລ້ວຫມໍກໍເລົ່າຕໍ່:

- ເອີ, ປິນ, ໃນຫ້ອງເຮັດວຽກຂອງ ໂຣນເຊີ ນັ້ນ ຂ້ອຍໄດ້ໄປພົບກັບຮູບພາບອັນສະຫຍົດສະຫຍອງທີ່ສຸດ! ວັດຖຸທຸກສິ່ງຢ່າງຂວ້ຳສະຫລັກຫັກພັງກອງເກັນຢູ່. ຢູ່ເທິງພື້ນແລະຝາເຮືອນເຕັມໄປແຕ່ຮອຍເລືອດສົດໆ. ຄວາມຄິດທໍາອິດຂອງຂ້ອຍ - ໂຣນເຊີຖືກຄາດຕະກໍາ! ແລ້ວຂ້ອຍກໍຟ້າວແລ່ນໄປຊອກຫາຊາກສົບຂອງຜູ້ເຄາະຮ້າຍ. ນໍາຮອຍເລືອດນັ້ນໄປ ມັນກໍແຈ່ມແຈ້ງວ່າ ຄາດຕະກອນຫລືພວກຄາດຕະກອນໄດ້ດຶງເອົາເພິ່ນລົງເຫວໂດຍຜ່ານສວນໄປ...

- ແລ້ວກໍ່ຖິ້ມລົງທະເລ, - ຂ້າພະເຈົ້າຟ້າວເວົ້າຂຶ້ນ, ສະດຸ້ງຄືງ ເມື່ອຄິດຄືນເຖິງເວລານາທີອັນສະຫຍອງຂວັນຂອງຂ້າພະເຈົ້າທີ່ ມາຊາດລານ.

- ຂ້ອຍກໍເຄີຍຄິດເຊັ່ນນັ້ນ, - ວານດິກເຫັນດີ. ແຕ່ເມື່ອຄວາມຮູ້ສຶກເບື້ອງຕົ້ນຄ່ອຍຜ່ອນຄາຍລົງແດ່ແລ້ວ, ຂ້ອຍກໍຕົກລົງໃຈຫາຄໍາອະທິບາຍດ້ວຍເຫດດ້ວຍຜົນຕໍ່ເຫດການຢູ່ອ້ອມຂ້າງທຸກຢ່າງນັ້ນດ້ວຍຄວາມມີສະຕິປັນຍາ. ຖ້າຂ້ອຍແລ່ນໄປຫາປ້ອມຍາມຕໍາຫລວດທັນທີ... ເຊື່ອແນ່ວ່າເຈົ້າກໍຈິຮູ້ດີແລ້ວວ່າ, ບັນຫານັ້ນມີຄວາມຫມາຍຄືແນວໃດ - ໄປຫາ ສາລະວັດມາຊາດລານບໍ່? ຫລືຈະໄປຫາກົງສູນທູດ...ແລະກໍຈະບໍ່ມີໃຜເຊື່ອຂ້ອຍເລີຍ.

ຂ້າພະເຈົ້າກໍາຮັດມືທັງສອງເບື້ອງເຂົ້າ:

- ອາ, ເປັນອັນວ່າເຈົ້າປົບຕີ?

- ບໍ່ດອກ, ປິນ ຂ້ອຍແກ້ເຄື່ອງອອກແລ້ວໂດດລົງນໍ້າ. ໂດນລົງກະໂດບ່ອນມີດາຝັ່ງຢູ່ທາງລຸ່ມນັ້ນໂລດ, ບ່ອນທີ່ເຂົາເຈົ້າຖິ້ມ...

- ໂຣນເຊີ?

- ບໍ່, ກົງໃສ່ຂີ້ຫີນ. ຂ້ອຍພົບມັນຢູ່ພື້ນນໍ້າພຸ້ນ, ມັນເປັນກົງສີຂຽວຊໍ້າງາມງາຫນ່ວຍຫນຶ່ງ, ມັນກົມກືນເຂົ້າກັນກັບສີໄຄທະເລຢ່າງຫນ້າອັດສະຈັນອີ່ຫລີ. ແລ້ວຂ້ອຍກໍຄິດເຖິງຜູ້ພິພາກສາຜູ້ສະຫລາດແຫລມຄົມຄົນຫນຶ່ງ, ລາວເດີນຕາມຫລັກການອັນຫນຶ່ງຄື, ຖ້າບໍ່ຄົ້ນພົບຊາກສົບ

ແລ້ວ ການສັນນິຖານຄະດີຄາດຕະກຳຫນຶ່ງແມ່ນບໍ່ມີຄວາມຫມາຍ. ແລ້ວຂະນະນັ້ນ ຂ້ອຍກໍກັບຄືນມາເຮືອນດ້ວຍອາລົມຈິດອັນຫຸ່ນຫ່ຽງທີ່ສຸດ. ແປກທີ່ສຸດ, ທຸກໆຫ້ອງລ້ວນແຕ່ມີເລືອດທາຢູ່. ຖ້າມີຈັກສາມຄົນຖືກຂ້າເລືອດກໍຄືຊິບໍ່ຫລາຍປານນັ້ນ. ແຕ່ເລືອດມັນສິດພຸ່ງໃສ່ຝາທັງຫົກດ້ານ. ພໍຂ້ອຍວາດພາບເຖິງຄະດີຄາດຕະກຳນັ້ນເທື່ອໃດແລ້ວ ພາໃຫ້ຂ້ອຍເຂົ້າໃຈວ່າ ກະໂຫລກຫົວຂອງໂຣນເຊີຖືກທຸບໃຫ້ແຫລກໄປສາມເທື່ອລຽນຕິດຢູ່ພາຍໃນສາມຫ້ອງ. ຄັນຊັ້ນລອງຖາມເບິ່ງດູວ່າ, ຫລັງຈາກທີ່ຖືກບາດເຈັບຈົນເຖິງແກ່ຄວາມຕາຍຢູ່ໃນຫ້ອງສະຫມຸດແລ້ວ, ເຮັດຈັ່ງໃດລາວຈຶ່ງຈະສືບຕໍ່ສູ້ຣົບຕົບຕີຢູ່ທີ່ຫ້ອງເຮັດວຽກໃນເວລາຕໍ່ມາໄດ້ອີກ? ນະທີ່ນີ້ ລາວຊ້ຳຖືກທຸບຈົນຫົວແຫລກໄປອີກຄັ້ງຫນຶ່ງ, ແລ້ວລາວກໍແລ່ນໄປຫ້ອງຮັບແຂກຢູ່ໃກ້ຫົວຂັ້ນໄດນັ້ນ, ແລະນະທີ່ນັ້ນລາວຊ້ຳຖືກຂ້າເປັນຄັ້ງທີ່ສາມອີກຊັ້ນຫວະ? ປານນັ້ນຂ້ອຍກັບບໍ່ໄດ້ຍິນສຽງຫຍັງເລີຍ, ເຖິງແມ່ນວ່າຂ້ອຍຈະນອນຢູ່ລຸ່ມຫ້ອງເຮັດວຽກນັ້ນກໍຕາມ?

- ເຈົ້າກໍມີຄວາມຮູ້ທາງດ້ານສັນລະສູດຄະດີຫວະ? - ຂ້າພະເຈົ້າຍົກຄຳຖາມຂຶ້ນມາຢ່າງບໍ່ໄດ້ຕັ້ງໃຈ.

ວານດິກ ຍົກບ່າ.

- ບໍ່... ຄວາມຄິດອັນເຂັ້ມແຂງໄດ້ນຳເອົາຂ້ອຍໄປສູ່ຕັກກະສາດຂອງເຫດການ. ຂ້ອຍຖືວ່າເລືອດນັ້ນຖືກພົ່ນຂຶ້ນໃສ່ຝາຢ່າງມີເຈດຕະນາ. ເພາະວ່າ ໂຣນເຊີອາດຈະມີເລືອດສະສົມໄວ້ໃນກະປຸ໋ງແກ້ວ. ອາດຈະເອົາເລືອດຫນ້ອຍຫນຶ່ງມາຈາກຝານັ້ນມາວິໄຈທາງວິທະຍາສາດເບິ່ງ ແລະໃຊ້ກ້ອງຈຸລະທັດສ່ອງເບິ່ງ ແລ້ວກໍຈະຮູ້ໄດ້ຢ່າງຊັດເຈນວ່າ ເລືອດນັ້ນເປັນເລືອດຂອງສັດປະເພດໃດ. ນອກຈາກນັ້ນ ກໍຈະຮູ້ລະອຽດຕື່ມວ່າເລືອດນັ້ນຢູ່ໃນຫມວດໃດນຳອີກ. ແຕ່ຂ້ອຍບໍ່ມີເວລາຈະໄປຂູດເອົາເລືອດແຫ້ງຢູ່ເທິງຝານັ້ນ. ຂ້ອຍຊັ່ງຊາຢ່າງວ່ອງໄວແລະເລີ່ມເຂົ້າໃຈວ່າໂຣນເຊີເອງ...ແມ່ນ, ແມ່ນແລ້ວ, ປິນ! ໂຣນເຊີມີເຫດຜົນທີ່ຈະກະທຳເຊັ່ນນັ້ນ. ແຕ່ນັບທັງຜູ້ຕ້ອງໂທດແລະຜູ້ຕີເຮັດລ້ວນແຕ່ວາງຮ່ອງຮອຍ ແລະສັນຍາລັກຂອງວິຊາອາຊີບຂອງມັນໄວ້. ໂຣນເຊີ ພົ່ນເລືອດຂຶ້ນແບບນັ້ນມັນເກີນຂອບເຂດແລ້ວ. ແຕ່ເມື່ອຂ້ອຍສັງເກດເຫັນທໍ່ສອງອັນຢູ່ຂ້າງຫ້ອງນອນຂອງຂ້ອຍແລ້ວ, ໃນນັ້ນມີແຕ່ສິ່ງທີ່ບໍ່ມີຄຸນຄ່າຫຍັງເລີຍ, ສຳລັບຂ້ອຍ, ຂໍ້ສັນນິຖານກ່ຽວກັບຄະດີເກົ້າກໍ່ການຂ້າເຈົ້າເອົາຂອງພາງນີ້ໄດ້ກາຍມາເປັນສິ່ງປະຈັກແຈ້ງ. ຄັນຊັ້ນໃຜ

ຈະເປັນຜູ້ມີພົນໃນການແກ້ງວາງແຜນສ້າງຄະດີຄາດຕະກຳ ໂຣບເຊີ ແລ້ວທັບຄວາມສົງໃສມາໃສ່ຂ້ອຍບໍ່? ເພາະວ່າຖ້າຂ້າໂຣບເຊີ ເປັນຫຍັງຈຶ່ງບໍ່ຂ້າຂ້ອຍນຳ? ຖ້າເຂົາສາມາດປະຕິບັດການເຊື່ອງເງື່ອນດ້ວຍການກົ້ມສົບໂຣບເຊີ ລົງນ້ຳໂດຍສະດວກແລ້ວ ເປັນຫຍັງເຂົາເຈົ້າຈຶ່ງບໍ່ເອົາສິ່ງທີ່ກີກປຸ້ນຊິງໄດ້ນັ້ນໄປນຳ? ສິ່ງດຽວທີ່ພໍສະຫລຸບໄດ້ກໍຄື: ໂຣບເຊີ ຢາກຈະໄປໃຫ້ຫວິດຈາກຂ້ອຍ, ດັ່ງນັ້ນຈຶ່ງອອກອຸບາຍມອບຕົວຂ້ອຍໃຫ້ແກ່ສາລະວັດ, ສ່ວນຕົວລາວເອງແມ່ນຫລົບຫນີໄປ, ເຮັດຄືກັນກັບ "ສາດສະດາຈານງູ" - ອາວຂອງລາວຫັ້ນແຫຼະ. ແຕ່ຂະນະນັ້ນຂ້ອຍບໍ່ພຽງແຕ່ຕ້ອງເອົາຕົວລອດໄປຈາກເງື້ອມມືຂອງສາລະວັດ, ຫາກຍັງຈະຕ້ອງຕາມ ໂຣບເຊີໄປໃຫ້ທັນອີກ. ຂ້ອຍເຂົ້າຫ້ອງອາບນ້ຳແລະກ່າຍເຄື່ອງນຸ່ງກໍເລີຍເກັບໄດ້ແວ່ນນ້ອຍຂອງໂຣບເຊີທີ່ລືມໄວ້. ຂ້ອຍແຍງເບິ່ງຕົນເອງແລະ...ຈຳຕົນເອງບໍ່ໄດ້ອີກ. ດຽວນີ້ເຈົ້າກໍຄົງເຫັນແຈ້ງແລ້ວວ່າຂ້ອຍຄືກັບວານດິກເມື່ອກ່ອນຫລືບໍ່.

- ຄືນ້ອຍຫນຶ່ງ, - ຂ້າພະເຈົ້າຢືນຢັນ.

- ບໍ່ຄືຈັກດີ້ເລີຍ, - ວານດິກ ແກວ່ງຫົວຢ່າງເຈັບຊ້ຳ. - ແລ້ວຜ່ານຈາກປ່ອງຢ້ຽມຂ້ອຍແນມເຫັນພວກສາລະວັດພວມເຕົ້າໂຮມກັນຢູ່ເທິງຫ້ອງກະຫນົບໄກໆພຸ່ມ. ເພາະວ່າຖ້າ ໂຣບເຊີ ຕົກລົງຊິກຳຈັດຂ້ອຍ, ແລ້ວລາວກໍຕ້ອງເປັນຜູ້ໂທລະສັບໄປບອກໃຫ້ຫົວຫນ້າສາລະວັດຮູ້ໄວ້ກ່ອນແລ້ວ, ແມ່ນບໍ່ລະ? ບະ, ໃນກໍລະນີ ຈັ່ງຊີ້, ຕາມປົກກະຕິແລ້ວມັນກໍຈະບໍ່ມີການຊັ່ງຊາຫຍັງອີກແລ້ວ, ມີແຕ່ປົບເທົ່ານັ້ນແລ້ວ. ປົບ, ຂະນະດຽວກັນ ເຈົ້າກໍມາທີ່ປະຕູສວນ...

- ເຈົ້າຫລອກຂ້ອຍ ເຂົ້າໄປໄດ້ຢ່າງຄ່ອງແຄ້ວ, ບັກເພດມຶງເອີຍ! - ຂ້າພະເຈົ້າສະເດີດຕົວຂຶ້ນເພາະຄວາມຊົງຈຳອັນປີ້ນ.

- ແຕ່ເຈົ້າຊິໃຫ້ຂ້ອຍເຮັດຈັ່ງໃດລະ? ການກະທຳທີ່ຫລັກແຫລມນັ້ນຍາມໃດກໍງ່າຍດາຍຢູ່ສະເຫມີ. ຂ້ອຍບໍ່ອາດຈະອອກມາປະກົດຕົວໄດ້ເພາະເຈົ້າຈະບໍ່ຈື່ຂ້ອຍ. ການພົບປະກັບເຈົ້າຈະເຮັດໃຫ້ຂ້ອຍເສຍເວລາໄປ, ແລະເຊື່ອແນ່ວ່າພວກເຮົາທັງສອງລ້ວນແຕ່ໄປບໍ່ລອດ. ຂ້ອຍກືວ່າຖ້າສາລະວັດພົບເຈົ້າຢູ່ໃນເຮືອນນັ້ນພຽງຜູ້ດຽວ ແລ້ວເຈົ້າກໍຈະຢືນຢັນວ່າຕົນເປັນຜູ້ບໍ່ມີໂທດຫຍັງໄດ້ງ່າຍກວ່າ. ຂ້ອຍສາລະພາບວ່ານີ້ມັນເປັນແຜນອັນບັງອາດຢ່າງຫນຶ່ງ, ແລະຂ້ອຍກໍບໍ່ມີຄວາມຜິດຫຍັງຫາກເຈົ້າຈະພົບກັບອຸປະສັກນັ້ນ. ຫນັງສືພິມຕ່າງໆໄດ້ລົງພິມກ່ຽວກັບຄະດີກາກ

ເນໂຣ ພ້ອມດ້ວຍລາຍລະອຽດທຸກຢ່າງຂອງມັນ... ເອີນີ ບີນ, ເຈົ້າຮູ້ບໍ່ວ່າແມ່ນຫຍັງມາຊ່ວຍກອບກູ້ເອົາເຈົ້າໃຫ້ຫວິດມົ້ນໄປໄດ້ ?

- ບໍ່ແລ້ວ.

- ມັນແມ່ນເລື່ອງຕອນຢູ່ໃນຄຸກເຈົ້າບໍ່ໃຫ້ຄຳຕອບແກ່ເສດເຈ້ຍຂອງບີກເດັນ ເພື່ອນຂອງກາກເນໂຣຕົວແທ້ - ແລະໄດ້ຕົກລົງໃຈປ້ອງກັນຕົນເອງຢູ່ຕໍ່ໜ້າສານນັ້ນແລ້ວ. ໂລກຂອງນັກໂທດມັກການກະທຳນີ້ເປັນຢ່າງຍິ່ງ. ເຂົາເຈົ້າເວົ້າກັນວ່າພວກຂີ້ລັກນັກປຸ້ນຢູ່ແຫ່ງນັ້ນໄດ້ໄປເບິ່ງການຕັດສິນແລະປະກົດວ່າເຂົາເຈົ້າໄດ້ອອກເງິນກັນເພື່ອຈ້າງນັກກົດໝາຍໃຫ້ເຈົ້າ.

- ເຈົ້າຮູ້ລາຍລະອຽດເຫຼົ່ານີ້ມາຈາກໃສ, ວານດິກ? - ຂ້າພະເຈົ້າຮ້ອງຂຶ້ນແລະແນມເບິ່ງໜ້າຂອງໝໍນາຍພານນິກນັ້ນດ້ວຍຄວາມສົງໃສ.

- ເລື່ອງທັງໝົດເຫຼົ່ານີ້ ລ້ວນແຕ່ຕີພິມລົງໃນໜັງສືພິມຕ່າງໆ, ບີນທີ່ຮັກແພງເອີຍ. ແຕ່ປະຈຸບັນນີ້ ເລື່ອງນັ້ນມັນບໍ່ສຳຄັນແລ້ວ. ສ່ວນເວລານັ້ນ, ເມື່ອຂ້ອຍບອກເຈົ້າໃຫ້ເຂົ້າໄປນັ່ງຢູ່ໃນຫ້ອງຂອງຂ້ອຍແລ້ວ, ຂ້ອຍກໍລັກຄືດຂໍໂທດນຳເຈົ້າຢູ່ ແລະກໍຊຸດຕົວຈາກຝັ່ງລົງສູ່ນ້ຳ. ຂ້ອຍຟ້າວຫລາຍ. ໂຣນເຊີໄປກ່ອນຂ້ອຍຢ່າງນ້ອຍກໍແມ່ນສາມຊົ່ວໂມງແລ້ວ. ຊາວປະໂມງທີ່ມາຊາດລານ ລ້ວນແຕ່ເປັນຄົນດີມີຄວາມສຸດຈະລິດທັງນັ້ນ, ແລະເຮືອໃບລົມຂອງຄົນຫາປາກະວາກຕາໂຣກໍມາປະກົດຕົວຂຶ້ນຖືກກັບກາລະໂອກາດທີ່ສຸດ, ມັນໄດ້ດຶງເອົາຂ້ອຍຂຶ້ນ. ເມື່ອຂ້ອຍໄປເຖິງຝັ່ງອ່າວເບື້ອງພຸ້ນ, ຢູ່ໃກ້ໆກັບແຫລມລູການັ້ນ, ຂ້ອຍກໍໄດ້ຮັບຂ່າວກ່ຽວກັບກຳລະນີກຳປັ່ນ "ບຸກຊຸກ" ຈົມແລະກໍຮູ້ວ່າຕອນເຊົ້າເຮືອຫາປາລຳໜຶ່ງໄດ້ບັນທຸກຊາວອະເມລິກາຜູ້ໜຶ່ງທີ່ຖືກຖີບອອກຈາກມາຊາດລານໄປ. ເປັນອັນວ່າ ຂ້ອຍມີຄວາມຫຸ່ນໃຈ. ຂ້ອຍກະຫລຳຕົວຕາມຮອຍຂອງ ໂຣນເຊີ ໄປຄືກັບໝາພານໂຕໜຶ່ງ. ຂ້ອຍໄດ້ເດີນທາງຮ່ວມລາວໄປໃນຂະບວນລົດໄຟໜຶ່ງ, ແຕ່ພໍໄປຮອດທາງຄົດຕອນໜຶ່ງທີ່ ແກກວຸດ, ຕໍ່ໜ້າຂົວເຫລັ້ມໜຶ່ງ ລາວເລີຍໂດດລົງລົດໄຟໄປ. ຂ້ອຍຈຳຕ້ອງໂດດລົງຢູ່ຝັ່ງເຊເບື້ອງນັ້ນ. ຂ້ອຍຕາມລາວທັນຢູ່ທີ່ ຣາອູລິນເຊີ, ໃນຂະນະທີ່ລາວຂຶ້ນເຮືອບິນດ່ວນສາຍ ຟຣິດສະໂກເຣໂນ ເອັງໂກ ຊີກາໂກ. ເງິນຫວະ? ບີນ, ບໍ່ວ່າດີ ເຈົ້າຈະບໍ່ເຂົ້າໃຈວ່າ ບໍລິສັດການຄ້າໜຶ່ງຍ່ອມບໍ່ຫວາດຫວັ່ນຕໍ່ລາຍຈ່າຍໃດໆ ໃນເມື່ອມັນຕ້ອງການຕິດຕາມຄູ່ຕໍ່ສູ້? ຂ້ອຍໄປເຖິງ ແປັນເລໂຟນ ກ່ອນ

ໂຮນເຊີ, ພາຍຫລັງທີ່ເຮືອບິນຂອງຂ້ອຍກາຍເຮືອບິນຂອງລາວຢູ່ເທິງບໍລິເວນໃກ້ຄຽງກັບ ເດເຕີໂຮຍ. ແຕ່ພີສາດຕົວນີ້ທັນໄດ້ຂຶ້ນກຳປັ່ນ "ເກຕູກີ" ກ່ອນຂ້ອຍ. ຂ້ອຍຕ້ອງຢູ່ທີ່ທ່າກຳປັ່ນຂອງບໍລິສັດ "ອວາຍສະຕາ". ຂ້ອຍຄິດວ່າບໍ່ຈຳເປັນຈະເລົ່າລາຍລະອຽດກ່ຽວກັບການຊອກຄົ້ນຫາໂຮນເຊີ ຢູ່ ເອີລີບດອກ. ໃນທີ່ສຸດຮ່ອງຮອຍຂອງລາວກໍພາຂ້ອຍມາຈົນເຖິງ ແອຊູໂອເຣີ. ມື້ລາງແມ່ຂອງຂ້ອຍກືກຳເນີດຢູ່ທີ່ ເວສະລີ, ແຕ່ຕິດຕາມພໍ່ຂ້ອຍໄປຢູ່ທີ່ ຢາວາ ດົນແລ້ວ. ຂ້ອຍອາໃສຢູ່ແຄມເຫມືອງແລະເລີ່ມຊອກຄົ້ນໄປທົ່ວບໍລິເວນໃກ້ຄຽງນີ້. ຈາກຊາຍຫນຸ່ມຂາຍຢາ ອິກພີ ຂ້ອຍເລີຍຮູ້ຈັກລະອຽດກ່ຽວກັບຄະລີຫາດຫລັງທີ່ຫາກໍສ້າງຂຶ້ນຢູ່ຂ້າງພາກຸຫລາບຄູ່ເມື່ອປີກາຍນີ້ແລະຮູ້ກ່ຽວກັບທ່ານສາດສະດາຈານທີ່ຫາກໍມາຢູ່ແຫ່ງນັ້ນ ພ້ອມດ້ວຍຄົນໃຊ້ເກົ້າຂອງຕົນ. ທ່ານ ໂດບີ ໄດ້ເຮັດໃຫ້ຂ້ອຍມີຄວາມສົນໃຈ ເຊື່ອແນ່ວ່າຮ້ານອິກພີສາມາດຄ້ວາເງິນກ້ອນໃຫຍ່ທີ່ສຸດມາໄດ້ ຍ້ອນໄດ້ສົ່ງເຄື່ອງອຸປະກອນທົດລອງແລະຢາທົດລອງຈຳນວນຫລວງຫລາຍໃຫ້ແກ່ລາວ. ກ່ອນນີ້ ເຄິ່ງປີ, ນັບວ່າເປັນໂຊກດີສຳລັບຂ້ອຍ, ເມື່ອແນມຈາກກ້ອງສ່ອງທີ່ສ່ອງແຕ່ລຸ່ມຂຶ້ນເມືອນັ້ນ ຂ້ອຍບໍ່ໄດ້ແນມເຫັນຄົນແຕ່ພຽງສອງຄົນເທົ່ານັ້ນ ແຕ່ມັນມີເຖິງສາມຄົນຢູ່ເທິງເດີ່ນຂອງຄະລີຫາດຫລັງນັ້ນ. ພວກເຮົາຈົ່ງສັນນິຖານເບິ່ງວ່າ, ກ້າຢູ່ແຫ່ງນັ້ນມີແຕ່ສອງຄົນດຳລົງຊີວິດຢູ່ຄືໂຮນເຊີ ແລະຄົນໃຊ້, ແລ້ວຄົນທີ່ສາມມັນຊິແມ່ນໃຜ? ແມ່ນບໍ່ວ່າ ອາວຂອງລາວມາຫັ້ນຢ່າງບັງເອີນ? ຈະຕ້ອງເວົ້າວ່າໃນໄລຍະມໍ່ງມານີ້ ຂ້ອຍບໍ່ໄດ້ສົ່ງຂ່າວຄາວຫຍັງໃຫ້ແກ່ຜູ້ຮັບຈົດຫມາຍຂອງຂ້ອຍເລີຍ. ຂ້ອຍຢາກຈະສົ່ງຂ່າວອັນໃດອັນຫນຶ່ງທີ່ສຳຄັນຍິ່ງ, ແຕ່ກ້າຈະຂຽນຄຳລາຍງານຕາມຄວາມຈິງແລ້ວ ເລື່ອງມັນກໍແມ່ນວ່າຂ້ອຍໄດ້ສູນເສຍຮ່ອງຮອຍໃນການຕິດຕາມທັງອາວແລະຫລານໄປແລ້ວລະ. ແລ້ວຂ້ອຍກໍຈຶ່ງຕົກລົງໃຈສ່ຽງໄພເລັດລອດເຂົ້າໄປໃນຄະລີຫາດ...

- ຄັນຊັ້ນແມ່ນເຈົ້າເອງຫວະບິນເຂົ້າປະຕູປ່ອງຢ້ຽມຂອງຂ້ອຍ? - ຂ້າພະເຈົ້າພຶມພຳ.
- ເປັນຫຍັງຫມາຈຶ່ງບໍ່ກັດເຈົ້າລະ?

- ຢ່າຊິໄປເຊື່ອຫມາແລະແມວ, ບິນເອີຍ. ໃນຈຳພວກຫມານັ້ນ, ມີບາງໂຕ ຍ້ອນຊິນປົ້ງພຽງຕ່ອນດຽວມັນກໍຍອມຫຸບປາກຢູ່, ແມ້ແຕ່ໃນເວລາເຂົາເຈົ້າບິນຂຶ້ນປ່ອງຢ້ຽມຢູ່ເທິງຈອມດັງຂອງມັນ, ມັນກໍບໍ່ຍອມເຫົາ. ແຕ່ນັ້ນມັນເປັນພຽງເລື່ອງຂີ້ຜອຍຊື່ໆດອກ. ຫມາຂອງເຈົ້າ

ປະເອີບໃຈໄປຍ້ອນຊິ້ນມັນໆຕ່ອນຫນຶ່ງເທົ່ານັ້ນ, ສ່ວນຂ້ອຍແມ່ນຢ່ອງເຂົ້າປ່ອງຢ້ຽມ, ຫລັງຈາກທີ່ໄດ້ໃຊ້ຂອງອັນນີ້ດີ... - ວານດິກເດ່ໄຟສາຍນ້ອຍໆອັນຫນຶ່ງທີ່ເຮັດເປັນຄືກະດຸມເສື້ອປີກບ່າງຂອງເຂົາອອກມາໃຫ້ຂ້າພະເຈົ້າເບິ່ງ. - ແຕ່ຊ້ຳມີຊາຍຫນຸ່ມຄົນຫນຶ່ງນອນຢູ່ເທິງຕຽງໃນຫ້ອງ, ຄົນຜູ້ນັ້ນຫລັບຕາໄວ້ແລະພະຍາຍາມກັ້ນໃຈຢູ່. ຂ້ອຍບໍ່ລັ້ງຫນ້າເຄີຍຕາກັບຄົນຜູ້ນັ້ນ. ສະເພາະຂ້ອຍແລ້ວການໄປຢ້ຽມຢາມການຂ່າວຄັ້ງທຳອິດ ສ່ຳນັ້ນກໍພໍແລ້ວ. ຂ້ອຍປີນຂຶ້ນຕົ້ນກໍ່ແລ້ວຈາກບ່ອນນັ້ນກໍສາມາດຕິດຕາມເບິ່ງວ່າມີຫຍັງແດ່ທີ່ພວມເກີດຂຶ້ນຢູ່ຊັ້ນສອງ. ແຕ່ຂ້ອຍໄດ້ຍິນສຽງດັງສວາດໆຢູ່ທາງຫລັງແຈເຮືອນພຸ້ນ, ແລ້ວຂ້ອຍກໍຄືວ່າຄວນຈາກຄະລືຫາດນັ້ນໄປຈະດີກວ່າ. ບາດນີ້ແມ່ນບັນຫາສຸດທ້າຍ. ກ່ອນນີ້ສອງສາມມື້ ຂ້ອຍສັງເກດເຫັນວ່າມີສອງຄົນອອກຈາກຄະລືຫາດໄປຫລິ້ນຢູ່ພູ, ແຕ່ກັບມາພຽງຜູ້ດຽວ. ທີ່ປ່າ ປາຕຣິກ ຂ້ອຍສາມາດແນມເຫັນປະຕູເຂົ້າສູ່ຄະລືຫາດໄດ້ຢ່າງຊັດເຈນທັງສອງປ່ອງ, ແລະຂ້ອຍກໍນອນຢຽດຢູ່ກັບກ້ອງສ່ອງອັນນີ້. ມັນຢູ່ນີ້ເດ... - ເວົ້າຮອດນີ້ ວານດິກ ເອົາກ້ອງສ່ອງຊັ້ນດີເລີດອັນຫນຶ່ງອອກມາໃຫ້ຂ້າພະເຈົ້າເບິ່ງ. - ຂ້ອຍແນມເບິ່ງແລະລໍຖ້າຢູ່ວ່າຜູ້ທີ່ສອງຈະກັບມາຄະລືຫາດຫລືບໍ່...

- ບາງທີອາດແມ່ນຜູ້ທີ່ຫນຶ່ງອອກໄປສິ່ງທາງຜູ້ທີ່ສອງຊື່ໆກໍເປັນໄດ້? - ຂ້າພະເຈົ້າຖາມວານດິກ.

- ສິ່ງຫຍັງກັນມາແປກແທ້, ໃນເມື່ອທັງສອງຄົນລ້ວນແຕ່ຖືໂຄມ "ເອີມີ", ກະຕິກໃສ່ນ້ຳ ແລະໂຄ້ງເຊືອກໄປນຳ. ຂ້ອຍແນມເຫັນຢ່າງຊັດເຈນທີ່ສຸດ. ກ້ອງສ່ອງຂອງຂ້ອຍສາມາດໃຊ້ຈຳແນກໄດ້ກະທັ້ງແມງວັນທີ່ຈັບຢູ່ເທິງດັ້ງຂອງລູກເຮືອທີ່ຢືນຢູ່ໃກເກີງຫັກໃນທະເລພຸ້ນນະ, ເຈົ້າບໍ່ເຊື່ອຫວະ...

ຂ້າພະເຈົ້າເລີຍເອົາກ້ອງສ່ອງມາປັບແລະແນມໄປສູ່ທະເລເທິງແຫລມດະເຍັງພຸ້ນແລະແນມເຫັນຝູງນົກແອ່ນໂມ້ພວມ ບິນເຈີດຢູ່ແຫ່ງດັ່ງກ່າວໄດ້ຢ່າງຊັດເຈນເຫມືອນກັບວ່າພວກມັນຢູ່ຫ່າງຈາກຂ້າພະເຈົ້າບໍ່ພໍເທົ່າໃດນ້ອນ້ແຫລະ.

- ຂ້ອຍນອນຢູ່ໃນປ່າແນມຂຶ້ນໄປຍັງຄະລືຫາດ, - ວານດິກເວົ້າ, ຈັບເອົາກ້ອງສ່ອງໄປຈາກມືຂອງຂ້າພະເຈົ້າ. - ທັນໃດນັ້ນ ຢູ່ທາງຫລັງຂອງຂ້ອຍກໍມີເງົາຜີທີ່ເປັນຕາຂົນຫົວລຸກໂຕຫນຶ່ງປະກົດຕົວຂຶ້ນ - ຄົນຜູ້ຫນຶ່ງດຳຫຸດດຳຫຸຍ, ເຄື່ອງນຸ່ງຂາດສ້ອຍ, ພາຍໂຄມໄຟ "ເອີມີ" ຢູ່ເທິງ

ຄໍແລະພາຍກະຕິກນ້ຳອັນນີ້ຢູ່ທາງຂ້າງ. ຄ່ຳມື້ນັ້ນເອງ ເຈົ້າກໍຂາຍມັນໃຫ້ບຣິດ, ສ່ວນຂ້ອຍຊື້ເອົາຈາກລາວມາໃນຕອນເຊົ້ານີ້ເອງ. ຜ່ານຈາກການໂອ້ລົມສົນທະນາກັນ, ເຈົ້າເຮັດໃຫ້ຂ້ອຍຫວນຄຶດເຖິງຕອນທີ່ພວກເຮົາພົບພໍ້ກັນຢູ່ທີ່ອຸທິຍານໆ. ຂະນະນັ້ນມັນສະໝອງຂອງຂ້ອຍກໍເລີ່ມທຳງານຢ່າງເຄັ່ງຕຶງໂລດ. ຂ້ອຍເອີ້ນເຈົ້າໃຫ້ຫລຽວຄືນມາເພື່ອຈະໄດ້ແນມເບິ່ງເຈົ້າໃຫ້ຊັດແຈ້ງກວ່າເກົ່າ. ຂ້ອຍໄດ້ສົມທຽບກັນເບິ່ງລະຫວ່າງການຫາຍໄປຂອງຄົນຜູ້ທີ່ສອງຢູ່ເທິງພູກັບການປະກົດຕົວຂອງຜີເປື້ອນເປິ ໂຕຫນຶ່ງຢູ່ທາງລຸ່ມໃສ່ກັນ. ມາເຖິງຕອນນີ້ ຂ້ອຍຢາກຖາມວ່າ ເຈົ້າຕົກລົງແຕ່ເທິງພູລົງໄປຮອດໃສລະ?

-ພວກເຮົາຫມົ້ນລົງໃນບໍ່ງວງຍາວ, -ຂ້າພະເຈົ້າພຶມພຳ, ຟັງເລື່ອງທີ່ເລົ່າເຖິງຕົນຢູ່ດ້ວຍຄວາມເອົາໃຈໃສ່.

-ເຈົ້າລອດຜ່ານເສັ້ນທາງລຳຊຸ່ຍຊຸ່ມແມ່ນບໍ່? ແນມເບິ່ງສີຫນ້າຂອງເຈົ້າເວລານັ້ນມີວາດອາດຫານທີ່ສຸດ. ຂ້ອຍຈື່ກະຕິກໃສ່ນ້ຳຂອງເຈົ້າ. ສາດສະດາຈານ ໂຣນເຊີ ເຄີຍກືມັນຕິດຕົວໄປໃນຂະນະທີ່ໄຕ່ຂິວແປັນຂຶ້ນກ່ຳປັນ "ເກຕູກີ". ກະຕິກນ້ຳຫນ່ວຍນີ້ເບິ່ງຕິດຕາດີ, ວັດຖຸບູຮານຢ່າງຫນຶ່ງທີ່ສາມາດເອົາເຂົ້າເກັບໄວ້ໃນຫໍພິພິດຕະພັນໄດ້. ຈອກເງິນຫນ່ວຍນັ້ນ, ຢ່າງນ້ອຍກໍມີອາຍຸສອງຮ້ອຍປີມາແລ້ວ. ເຈົ້າເບິ່ງແມະນີ, ເປັນວັດຖຸຫນຶ່ງທີ່ກຶກຕົບແຕ່ງໄວ້ຢ່າງງົດງາມຍິ່ງ, ຕົວອັກສອນຄວັດທີ່ສະຫລັກຊື່ແລະນາມສະກຸນຫຍໍ້ນັ້ນມັນເລີດລ້ຳທີ່ສຸດ!.. ແລ້ວເຈົ້າກໍຂາຍວັດຖຸຢ່າງຫນຶ່ງແບບນີ້ໃຫ້ ບຣິດດ້ວຍລາຄາກືກໂພດ! ຂ້ອຍຕ້ອງໄດ້ເອົາພັນເອກແຟຣັດເຊີນມາຊູ່ລາວດ້ວຍໂທດຊື້ເຄື່ອງລັກມາ, ລາວຈຶ່ງຍອມຂາຍມັນໃຫ້ຂ້ອຍດ້ວຍລາຄາກືກເທົ່າກັບເຄິ່ງຄ່າຂອງວັດຖຸບູຮານອັນນີ້.

ພວກເຮົາພ້ອມກັນແຍງເບິ່ງກະຕິກນ້ຳ, ນາຍຈອກນ້ອຍນັ້ນອອກມາ, ແລ້ວກໍຫັນມັນເຂົ້າໄປອີກ, ແລ້ວ ວານດິກກໍສະຫລຸບເລື່ອງຂອງຕົນ:

-ເຈົ້າປະພຶດຕົວຢ່າງໄຮ້ມາລະຍາດທີ່ສຸດຕໍ່ຂ້ອຍທີ່ຮ້ານອາຫານ "ລາຊາເສືອ" ໃນຂະນະທີ່ຂ້ອຍຢາກຈະຕຸບຈອກກັບເຈົ້າ. ກ່ອນຫນ້ານັ້ນ, ເລື່ອງທີ່ຂ້ອຍວາງແຜນເພື່ອໃຫ້ລູງເຈົ້າເລົ່ານັ້ນໄດ້ກໍ່ຄວາມສະເທືອນໃຈໃຫ້ແກ່ເຈົ້າຢ່າງແຮງ. ແຕ່ເຈົ້າກໍຄົງຮັກສາທ່າທີມິດງຽບຢູ່. ຂ້ອຍເຂົ້າໃຈວ່າ ເຈົ້າພວມລວບລວມແນວຄຶດທຸກຢ່າງເພື່ອຊອກຫາຊ່ອງທາງເຄື່ອນໄຫວອັນກືກ

ຕ້ອງ. ແມ່ນບໍ່? ອີກຢ່າງຫນຶ່ງ, ເຖິງຈັ່ງໃດ ຂ້ອຍກໍຍັງບໍ່ແນ່ໃຈວ່າ ຄົນຜູ້ທີ່ພາຍກະຕຶກນ້ຳອອກມາຈາກເສັ້ນທາງລຳຊຸ່ຍຊຸ່ມນັ້ນຈະແມ່ນກະໂດ ເຊມຸຍແອນປິນ ນີ້ເອງ. ນະທີ່ນີ້ ເມື່ອເຈົ້າຂາບລົງຕໍ່ຫນ້າກອງຟອນສອງກອງນີ້, ຂ້ອຍຈຶ່ງແນ່ໃຈວ່າເຈົ້າແມ່ນລູກຊາຍຂອງມື້ລາງສອງຜົວເມຍປິນ.

ວານດິກ ຢືນຂຶ້ນ, ປົດຫມວກອອກມາຖືໄວ້ແລ້ວໂນ້ມຕົວລົງຕໍ່ຫນ້າກອງຟອນຂອງພໍ່ແລະແມ່ຂ້າພະເຈົ້າດ້ວຍຄວາມຄາລະວະ.

- ສ່ວນປະຈຸບັນນີ້, ປິນ. - ເຂົາທຳລາຍບັນຍາກາດມິດງຽບດ້ວຍນ້ຳສຽງແຜ່ວເບົາ, - ພວກເຮົາຈຶ່ງພ້ອມກັນກັບສູ່ຕົວເມືອງເທາະ ຂ້ອຍພັກຢູ່ໂຮງແຮມ "ເຈົ້າສະຫມຸດ", ໃນເວລາກິນເຂົ້າທ່ຽງນັ້ນ, ຂ້ອຍຂໍຮ້ອງໃຫ້ເຈົ້າຈົ່ງເລົ່າຕື່ມໃຫ້ມັນຄົບກ້ວນຕໍ່ ຈາກເລື່ອງທີ່ຂ້ອຍໄດ້ເລົ່າມານີ້, ແລ້ວພວກເຮົາຈະຕັດສິນໃຈນຳກັນວ່າຈະຕ້ອງເຮັດຈັ່ງໃດຕໍ່ໄປ...

## V

ໂຮງແຮມ "ເຈົ້າສະຫມຸດ" ສະດວກດີ, ເພາະແຫ່ງນີ້ມີຫ້ອງສ່ວນຕົວ, ສາມາດນັ່ງດື່ມເຫລົ້າແລະລົມເລື່ອງລັບໆລີ້ໆຢູ່ໃນຫ້ອງໄດ້ໂດຍບໍ່ມີຜູ້ໃດມາລົບກວນ.

ຂ້າພະເຈົ້າໄດ້ເລົ່າຄືນເຖິງເລື່ອງພະຈົນໄພຂອງຕົນສູ່ ວານດິກ ຟັງແລະດ່າວ່າຄວາມຊົ່ວຊ້າຮ້ອຍແປດພັນປະການຂອງເຂົາທີ່ໄດ້ປະພຶດຕໍ່ຂ້າພະເຈົ້າຢູ່ ມາຊາດລານ.

- ປິນ, ອີກເທື່ອຫນຶ່ງ ຫວັງວ່າເຈົ້າຈະກະລຸນາອະໄພໂທດໃຫ້ຂ້ອຍ, - ວານດິກ ຕອບດ້ວຍສຽງສັ່ນໆ. ເຈົ້າກໍເຫັນແລ້ວຕ່ວາວ່າ: ເຮົາບໍ່ມີຄວາມຜິດຫຍັງແທ້ໆນີ້, ແຕ່ມັນຍ້ອນສະພາບແວດລ້ອມຊື່ໆ.

ພວກເຮົາໄດ້ກິນອາຫານທ່ຽງທີ່ແຊບທີ່ສຸດຄາບຫນຶ່ງ ແລະໃນຂະນະນີ້ ພວກເຮົາທັງສູບຢາທັງສະຫລຸບເຫດການຕ່າງໆຄືນ.

- ຫມາຍຄວາມວ່າ ໂດບີ ກໍຈ້າງເຈົ້າດ້ວຍເງື່ອນໄຂທີ່ລາວຈະເປັນຊ່າງຕັດຜົມໃຫ້ເຈົ້າຄືກັນ? - ວານດິກຖາມຄືນອີກ. - ບະ, ດຽວນີ້ ມັນແຈ້ງແລ້ວເດ ວ່າຄົນຜູ້ນັ້ນແມ່ນກະໂດໂຣນເຊີ, ຫລານຂອງ "ສາດສະດາຈານງ" ນັ້ນເອງ. ເຈົ້າຕ້ອງໃຊ້ນ້ຳຕາງແວ່ນ, ເກົ່າ

ຫລາຍ! ໂດບີ ຂອງເຈົ້າ ແລະກໍແມ່ນ ໂຣນເຊີ ຂອງຂ້ອຍນັ້ນເອງບໍ່ຢາກໃຫ້ພວກເຮົາແນມເຫັນໃບຫນ້າຂອງຄົນກຶກປ່ຽນໂສມໄປ, ເຮັດແບບນັ້ນມັນມີພິນກ່ວາ. ແລະສຽງໄອ "ອະຮື່, ອະຮື່" ນັ້ນອີກ... ຄໍຫອຍຂອງຄົນທັງສອງລ້ວນແຕ່ເສຍຄວາມເປັນປົກກະຕິໄປຍ້ອນຢາສູບ. ແລ້ວກະຕຶກໃສ່ນ້ຳພ້ອມດ້ວຍເຄື່ອງດິບແດ່ງ... ແມ່ນແລ້ວ, ປິນເອີຍ, ສາດສະດາຈານໂຣນເຊີ ຍັງມີຊີວິດຢູ່ ແລະກໍຄົງນັ່ງຢູ່ໃນຄະລີຫາດດ້ວຍຄວາມເປັນປົກກະຕິພາຍໃຕ້ນາມຂອງໂດບີ. ພວກເຮົາຈະຕ້ອງ...

ຂະນະນັ້ນຢູ່ທາງນອກປະຕູມີສຽງໂສ້ເຫລັກັນຂຶ້ນແດ່ເລັກນ້ອຍ. ວານດິກພູດລຸກຂຶ້ນແລະໄຂປະຕູລະອອກ.

- ມີເລື່ອງຫຍັງຫວະ? ໃຜຫັ້ນ?

ທີ່ລະບຽງມີສາວໃຊ້ສອງຄົນ ພວມສົນທະນາກັນຢູ່ຢ່າງພິດພົ້ນ.

- ຊຸມນາງສາວງາມເອີຍ, ເຊີນພວກນ້ອງເຂົ້າມານີ້ແດ່. - ວານດິກເຊີນ. ພວກນ້ອງຊ່ວຍມ້ຽນໂຕະນີ້ໃຫ້ແດ່ ແລ້ວເອົາເຫລົ້າຂາວມາໃຫ້ຈັກເຄິ່ງແກ້ວແດ່ເດີ. ເອີ, ມີເລື່ອງຫຍັງລະ?

ພວກນາງສາວເກັບກ້ວຍ, ຈານເຂົ້າໃສ່ກະຖາດ. ແລະນາງຫນຶ່ງໄດ້ເລົ່າຂຶ້ນວ່າ:

- ທ່ານ, ຊູດີ ຫາກໍໄດ້ຍິນແຂກຮັບປະທານຢູ່ທີ່ຫ້ອງໂຖງເລົ່າເລື່ອງປະຫລາດອັນຫນຶ່ງສູ່ກັນຟັງ, ປະກົດວ່າ ຍາແມ່ ໂລດີ, ຜູ້ຂຶ້ນຊື່ລືນາມວ່າມັກລ້ຽງແມວນັ້ນ, ມື້ວານນີ້ ໄດ້ຈັບເອົາແມວນ້ອຍງາມໆຕົວຫນຶ່ງມາຈາກກະຫນົບ ຍາແມ່ໃຫ້ມັນດື່ມນ້ຳນົມ, ແລ້ວບັງເອີນມັນເລີຍເຫົ່າຂຶ້ນແລະຂົບຍາແມ່.

- ແມວຫວະ? - ວານດິກຖາມ, ຍິ້ມແລະຫຼີ່ວຕາໃສ່ຂ້າພະເຈົ້າ. - ມັນເຫົ່າຫວະ?

- ຈ້າວ, - ຊູດີ ເວົ້າສອດຂຶ້ນ. - ລຸງເຖົ້າຍາມປະຕູ ນາຍເກີ ວ່າຈັ່ງຊັ້ນເດ, ລຸງໄດ້ຍິນມາຈາກຜູ້ກຳກັບວຽກເຮືອນຂອງພະຄຸນພໍ່ຫລວງ. - ແມ່ເຖົ້ານັ້ນຈົນລືມເກີບ, ລືມກົງຕີນໄວ້ຕະພຶດ, ຟ້າວແລ່ນໄປຫາກຸຕິຂອງພະຄຸນພໍ່ເພື່ອນິມົນຄຸນພໍ່ສູດໃຫ້ນາງຫວິດພົ້ນໄປຈາກການດົນບັນດານຂອງພີສາງນາງໄມ້...

- ແຕ່ພະຄຸນພໍ່ເອງກໍພວມປ່ວຍຢູ່, - ນາງນັ້ນຕັດບົດ, - ຄືຈັ່ງວ່າຫົວຂອງຄຸນພໍ່ໃຄ່ລົກ

ປົກຂຶ້ນ. ສ່ວນທ່ານຜູ້ພິພາກສານັ້ນມີດັງໂຕທີ່ສອງປົ່ງອອກມາຕື່ມ. ສາວໃຊ້ຂອງເພິ່ນແມ່ນ ຊີລີ ໄດ້ເລົ່າເລື່ອງນີ້ໃຫ້ໝູ່ເພື່ອນຟັງຢູ່ຕະຫລາດ, ຈົນວ່າສາລະວັດ ຟີລີ ຄົນງາມນັ້ນຂູ່ຈະເອົາມັນໄປສະຖານີຕຳຫລວດມັນຈຶ່ງເຊົາ...

-ສະຖານີຕຳຫລວດຊິເຮັດຕາຍອີສັງໃຫ້ມັນໄດ້, ກ້າທ່ານ ແຟຣັດເຊີນເປັນເພື່ອນກັບທ່ານ ເວີຍຊະເລີຍ? ຊູດີຫົວ. -ແລ້ວໃຜໆກໍຍັງເວົ້າວ່າທ່ານ ແຟຣັດເຊີນກໍປ່ອຍມາໄດ້ສາມມື້ແລ້ວ, ເປັນຮ້າຍເກີງຂັ້ນວ່າຢູ່ກະໂຕສະຖານີຕຳຫລວດເອງກໍບໍ່ມີໃຜຈື່ເພິ່ນໄດ້.

-ພວກນ້ອງເອີຍ, ພວກນ້ອງຫິວເຢັ້ຍ ເຮົາຫວະ? -ວານດິກເວົ້າກວນສາວໃຊ້ທັງສອງ.

-ພວກນ້ອງຊິໄດ້ເຢັ້ຍ ຢູ່ໃສ? -ຊູດີ ສາວຕາດຳ ຜູ້ວ່ອງໄວເວົ້າຂຶ້ນດ້ວຍຄວາມບໍ່ພໍໃຈ--ບໍ່ເຊື່ອທ່ານລອງອອກໄປເບິ່ງດູວ່າເຂົາພວມເລົ່າອີຫຍັງກັນຢູ່ຫ້ອງໂຖງພຸ້ນ.

ຊູດີ ຍົກບ່າຂຶ້ນຢ່າງທະນົງຕົວ, ແລ້ວເຂົາທັງສອງກໍໂຈມເອົາຖາດໃສ່ກ້ວຍ, ບ່ວງອອກໄປ.

-ຈັ່ງໃດລະ? -ວານດິກຫັນມາທາງຂ້າພະເຈົ້າ. -ຫລັງຈາກຫວິດມື້ນໄປຈາກເຈົ້າແລ້ວ ໂຣນເຊີ ກໍເລີ່ມສ້າງເລື່ອງຕະລົກຂຶ້ນຊັ້ນຫວະ? ປົນ, ເຈົ້ານັ່ງລໍຖ້າຢູ່ນີ້ຫານາທີກ່ອນເດີ ຂ້ອຍຊິແລ່ນໄປຫາທ່ານ ບຣິດຄາວໜຶ່ງ ເພື່ອຢາກຮູ້ວ່າເຂົາເຈົ້າພວມເວົ້າຫຍັງກັນຢູ່ທີ່ໂຕະຂາຍເຄື່ອງຂອງລາວ...

-ບໍ່, ເພື່ອນທີ່ຮັກເອີຍ, -ຂ້າພະເຈົ້າຍືນຂຶ້ນ. -ບາດນີ້, ເຈົ້າຈະຫລອກຂ້ອຍບໍ່ໄດ້ອີກແລ້ວ.

-ແມ່ນຫຍັງ? -ວານດິກຕື່ນ.

-ແມ່ນຫຍັງຊັ້ນຫວະ. ເພາະຂ້ອຍບໍ່ຢາກດົມດອກໂລຫະລຸ້ນປືນກົນສິບສອງນັດຍັດລູກໄວ້ຮຽບຮ້ອຍແລ້ວ ເປັນຄັ້ງທີ່ສອງອີກນັ້ນດີ. ສະເພາະຂ້ອຍເຫດການທີ່ເກີດຂຶ້ນຢູ່ ມາຊາດລານ ນັ້ນກໍເຮັດໃຫ້ຂ້ອຍເຂັດແລ້ວ.

-ແຕ່, ປົນ...

-ບໍ່ "ແຕ່ໆຕ່າງ" ຫຍັງໝົດ, ຫາກມັນເປັນເຊັ່ນນັ້ນ. ເມື່ອເຈົ້າອອກຫວິດ, ແລ້ວ

ທ່ານ ແພຣັດເຊີນກໍຈະມາປະກົດຕົວແລະພູກໂທດວ່າ ຂ້ອຍເປັນຜູ້ປ່ອຍພວກແມວເທົ່າຄື ຫມາເຂົ້າ ແອຊູໂອເຣີ. ຂໍຂອບໃຈລະເດີ.

ວານດິກ ເກີດໂມໂຫປຶງປັງຂຶ້ນ, ອີກຫນ້ອຍດຽວແມ່ນມັນສັກຂະໂຍງໃສ່ຂ້າພະເຈົ້າ.

- ເຈົ້າຢາກຜິດກັບຂ້ອຍຫວະ? ແມ່ນ, ດຽວນີ້ ຂ້ອຍບໍ່ເຊື່ອອີກແລ້ວວ່າ ເຈົ້າຈະບໍ່ເປັນໄສ້ດຽວກັນກັບໂຣນເຊີ.

- ຂ້ອຍນີ້ຫວະຊິເປັນໄສ້ດຽວກັນກັບລາວ. ຂ້ອຍນີ້ແຫລະເປັນຜູ້ທີ່ຢາກຈະຄິດໄລ່ບັນຊີກັບລາວກ່ວາສິ່ງອື່ນຫມົດໃນໂລກນີ້! - ຂ້າພະເຈົ້າແຜດຂຶ້ນ.

- ອີ່ຫລີບໍ່? ຄັນຊັ້ນກໍວິເສດລະຕິ, ພໍດີແຫລະ, ຊູດີ ມານີ້ແລ້ວ...

ວານດິກຮັບເອົາແກ້ວເຫລົ້າແລະຈອກໃຫຍ່ສອງຫນ່ວຍທີ່ສາວໃຊ້ນຳເຂົ້າມາ.

- ເພື່ອນມິດຕະພາບບໍ່ຄວນຈະກຽງກັນ, ບິນເອີຍ. ກົງກັນຂ້າມມັນຈະເຮັດໃຫ້ມີທີ່ສາມເຂົ້າມາແຊກແຊງໄດ້. ພວກເຮົາຈະຕ້ອງບຸກເຂົ້າ "ປະຕູ" ຂອງໂຣນເຊີ ກ່ອນທີ່ລາວຈະຮູ້ສຶກຕົວ. ບິນ, ຈົ່ງດື່ມເພື່ອການແກ້ໄຂກັນໂດຍສັນຕິແລະພົນສຳເລັດຂອງພວກເຮົາ! ກ່ອນທີ່ຈະເຄື່ອນທັບຍ່ອມຈະປະໃຫ້ມັນສະຫມອງແຈ່ມໃສແດ່ເລັກນ້ອຍ.

ພວກເຮົາດຸບຈອກກັນ. ຫລັງຈາກນັ້ນ ວານດິກ ກໍໄປນັ່ງຢູ່ທີ່ໂຕະຂາຍເຄື່ອງທີ່ຫ້ອງໂຖງຂອງໂຮງແຮມ "ເຈົ້າສະຫມຸດ" ອີກຄາວຫນຶ່ງ. ເຂົາຈຳເປັນຕ້ອງໄດ້ໄປປ່ຽນເງິນເອົາເງິນຍ່ອຍເພື່ອມາຈ່າຍໃຫ້ພວກສາວໃຊ້, ແລ້ວພວກເຮົາກໍມີໂອກາດໄດ້ງິນຄຳສົນທະນາປາໄສອັນພິດພື້ນຂອງແຂກທີ່ມາກິນອາຫານເຊິ່ງນັ່ງເຕັມຢູ່ທຸກໆໂຕະນັ້ນ.

"ຄວາມເວົ້າຄວາມຫນຶ່ງຂອງບັນດິດ ຍັງດີກ່ວາຄວາມເວົ້າລາມປາລາມດົງຂອງຄົນໂງ່ຕັ້ງຮ້ອຍເທົ່າ", - ທີ່ພະມ້າເຂົາມັກເວົ້າກັນຈັ່ງຊັ້ນ. ແລະການຕັ້ງຄຳຖາມພຽງສອງສາມຂໍ້ທີ່ ວານດິກຍົກຂຶ້ນມາຄ້າຍກັບບໍ່ໄດ້ຕັ້ງໃຈຖາມຢູ່ທີ່ໂຕະຂາຍເຄື່ອງນັ້ນກໍໄດ້ເຮັດໃຫ້ຫລາຍໆບັນຫາ ມີຄວາມກະຈ່າງແຈ້ງຂຶ້ນ.

ແອຊູໂອເຣີ ພວມຈົມດິ່ງຢູ່ພາຍໃຕ້ກະແສຂ່າວຊ່າລືແລະຄວາມວິຕົກກັງວົນໃຈຕ່າງໆນາງຂອງຄອບຄົວຕ່າງໆ. ເຖິງແມ່ນວ່າລະມັ້ງຂອງຄະນະກາຍຍະສິນຈະແຂງແຮງດີແລ້ວກໍຕາມ, ແຕ່ຢູ່ຕາມກະຫນົນຫົນທາງຕ່າງໆໃນເມືອງ ແອຊູໂອເຣີ ຊໍ້າມີແມວແລະຫມາປະຫລາດ ປະ

ກົດຕິວຂຶ້ນມາຢ່າງບັງເອີນ. ພວກແມວເຫົ່າວ້ຽງຂຶ້ນແລ້ວໂດດໄປກັດບີແຄ່ງຂອງຄົນເດີນທາງ. ສ່ວນພວກຫມານັ້ນມັນພະຍາຍາມໂດດຍອດຂຶ້ນໄປເທິງຮົ້ວຮາວຕ່າງໆ. ລູງເກົ້າມາຍເກີຄຸບສັດພວກນັ້ນມາໄດ້ຄູ່ຫນຶ່ງແລະຄຶດວ່າຈະລາກເອົາມັນໄປຂາຍໃຫ້ກອງກາຍຍະສິນ ເພື່ອໃຫ້ເຂົາເຈົ້າຊື້ໄປເປັນສັດສະແດງ. ເຈົ້າຂອງຄະນະກາຍຍະສິນໄດ້ຕົກລົງຊື້ເອົາພາຍຫລັງທີ່ໄດ້ການຄວາມເຫັນຂອງສັດຕະວະແພດເປັນທີ່ຮຽບຮ້ອຍແລ້ວ. ຫນັງສືພິມສະບັບຫນຶ່ງໄດ້ຕີພິມຄຳສຳພາດຂອງສັດຕະວະແພດຄົນຫນຶ່ງ. ເພິ່ນຜູ້ນີ້ໄດ້ຢືນຢັນວ່າຍັງມີການຄົງຕົວຂອງສັດສອງຊະນິດ ແມວ - ຫມາ ແລະ ຫມາ - ແມວ ນັ້ນໃນທຳມະຊາດຢູ່.

ທ່ານຜູ້ອ່ານຄົງຮູ້ຈັກດີເກືອງຄົນໄຂ້ຂອງທ່ານຫມໍພຣິດມາແລ້ວ. ປະລິມານຂອງຄົນໄຂ້ທະວີຂຶ້ນນຳຄູ່ມື. ຍາແມ່ ເກີເລດີຊີ ເວົ້າອອກມາເປັນສຽງຜູ້ຊາຍຢ່າງບັງເອີນ. ຄົນຍາມປະຕູບໍ່ອະນຸມັດໃຫ້ທ່ານໂກລີຜູ້ອຳນວຍການສູນໄປສະນີເຂົ້າປະຕູ, ເພາະຄົນນຸ່ງເສື້ອຄຸມຜູ້ນັ້ນບໍ່ຄືກັບທ່ານ ໂກລີ ເດີມຈັກເມັດເລີຍ. ສາວໃຊ້ໃນຫ້ອງນອນຂອງຍາແມ່ ໂລຕີ ຊື່ວ່າ ໂກກໍປ່ວຍ. ຮູບນອກຂອງຄົນປ່ວຍໄດ້ເຮັດໃຫ້ຍາແມ່ເຈົ້ານາຍແປກປະຫລາດວິຕົກ ເກືອງຂັ້ນວ່າຍາແມ່ຈຳຕ້ອງສ້າງຮາວກັ້ນຂຶ້ນຢູ່ໃນເຮືອນແລະສວດມົນ ພະຄຳພີອະທິການຂຶ້ນຕະພຶດ. ທ່ານຜູ້ກວດກາຫ້ອງການການເງິນທະນາຄານ "ເມີຍແອັນລິດລຸຍຍົງ" ໄດ້ສົ່ງພະນັກງານຫ້ອງການຊັ້ນຜູ້ນ້ອຍຂອງຕົນຜູ້ຫນຶ່ງຊື່ວ່າ ບິນ ໄປໃຫ້ທ່ານຫມໍພຣິດດ້ວຍຄວາມສະທ້ານຢ້ານກົວ, ໂດຍອ້າງວ່າຫມໍນີ້ຕິດພະຍາດເລີກລັບຢ່າງຫນຶ່ງ. ຂະນະທີ່ບິນ ໄປເຮັດວຽກ, ເຂົາເຈົ້າເຫັນຮອຍຊ້ຳອັນຫນຶ່ງຢູ່ກ້ອງຕາຂອງຫມໍ ເຊິ່ງກືກຊ່າງແກຫນວດໃນຄຸ້ມໄປສະນີທາແປ້ງກົມໄວ້ໃຫ້. ບິນອ້າງເອົາຮອດພະຜູ້ເປັນເຈົ້າມາສາບານວ່າຫມໍແຂງແຮງດີຢູ່ແລະການທີ່ມີຮອຍຊ້ຳນັ້ນກໍເພາະລົດກືບລົ້ມ ແຕ່ບໍ່ໄດ້ເວົ້າອອກມາວ່າຕາມຄວາມຈິງ ເລື່ອງນີ້ມັນໄດ້ເກີດຂຶ້ນພາຍຫລັງທີ່ຫມໍແວະເຂົ້າຮ້ານຂາຍເຫລົ້າທີ່ທ່າກໍາປັ່ນ. ເກືອງຈັ່ງໃດບິນກໍຄົງກືກໄລ່ອອກຈາກຫ້ອງການຈົນກ່ວາຈະຫາຍພະຍາດ. ມີສາລະວັດສອງຄົນຢືນຍາມຢູ່ຂ້າງໂຮງກາຍຍະສິນທີ່ງຽບສະຫງັດຢູ່ທີ່ສະຫນາມຫລວງ, ເຂົາໄລ່ທຸກໆຄົນທີ່ຈະຫລອບໆຫລອຍໆເຂົ້າໃກ້ ໂຮງກິດຈະກຳອັນເບື່ອຫນ່າຍນັ້ນອອກໃຫ້ຫ່າງປະມານສິບຫ້າຫລາ. ຢູ່ເທິງປະຕູເຂົ້າໂບດ, ເກົ້າມາຍເກີໄດ້ແຂວນປ້າຍ

ອັນໜຶ່ງຂຶ້ນ "ວິດການເທສະບານທຳຕ່າງໆ". ທີ່ຫ້ອງການເທສະບານມີປະກາດສະບັບໜຶ່ງປະກົດຕົວຂຶ້ນ: "ວິດການຕັດສິນຕ່າງໆ, ເພາະທ່ານຜູ້ພິພາກສາປ່ວຍ".

- ພວກເຮົາໄປຫາ ໂຣນເຊີດງວນີ້ເທາະ, - ວານດິກຊຸ່ມໃສ່ຫູຂ້າພະເຈົ້າໃນຂະນະທີ່ອອກຫວິດຈາກໂຮງແຮມ "ເຈົ້າສະໝຸດ".

ພວກເຮົາຟ້າວຍ່າງກາຍໜ້າຫ້ອງການຂອງ ເຊີຍເຕີນໄປ, ເກົ້າທີມພວມໃຊ້ມືສັ່ນໆຂອງຕົນທັງສອງເບື້ອງ ເພື່ອຕິດປ້າຍອັນໜຶ່ງໃສ່ປະຕູຫ້ອງການ: "ວິດເຮັດວຽກ".

ຊາວ ແອຊູໂອເຣີ ຮ້ອງສຸມກັນຢູ່ຫັ້ນ. ຊາຍຊະລາມືກຸດຜູ້ນັ້ນສວມໝວກສູງແບບບູຮານ ຫລັງຈາກອ່ານປ້າຍນັ້ນແລ້ວກໍກຸ້ມນ້ຳລາຍ ທັງຮ້ອງແຜດຂຶ້ນ:

- ເລື່ອງບ້າບໍ່ຄໍແຕກ!

ເກົ້າທີມສັ່ນໆຫົວແລ້ວໄຫ້ສະອື້ນຂຶ້ນ.

ບົບແບັກ ໂວເຣີ ກ້າວອອກມາຈາກປະຕູທາງງ່າຫູຟັງແລ້ວຖາມ:

- ເປັນຫຍັງຄົນທັງຫລາຍຈຶ່ງມາເຕົ້າໂຮມກັນຢູ່ນີ້?

ເທິງທ້ອງກະໜົນ, ລົດມ້າສອງລໍ້ຄັນໜຶ່ງພວມແລ່ນໄປ, ທ່ານໝໍຟຣິດນັ່ງຢູ່ໃນນັ້ນ. ມືສອງກ້ຳພວມຈັບຫີບບັນຈຸເຄື່ອງແກ້ວດັ່ງກອງໆ - ແກ້ວໆນັ້ນໜີບໃສ່ຕົວໄວ້ແໜ້ນໆ.

- ບົນເອີຍ, ບໍ່ມີເວລາອີກແລ້ວ. ຢ່າຊິເຮັດຕາປອກແນມເບິ່ງເຂົາຢູ່ອີກ, - ວານດິກເຕືອນສະຕິຂ້າພະເຈົ້າ. - ຂ້ອຍຮູ້ດີວ່າເຈົ້າຢາກຮູ້ຈັກວ່າ ສຸຂະພາບຂອງສາວຂາຍເຄື່ອງຢູ່ຮ້ານນ້ຳນັ້ນເປັນຈັ່ງໃດ. ຂ້ອຍສາມາດຈະຮັບປະກັນກັບເຈົ້າໄດ້ວ່າ - ດີທີ່ສຸດ. ເພາະມື້ວານນີ້ ຂ້ອຍໄດ້ທຳຄວາມຮູ້ຈັກກັບນາງນັ້ນ. ນາງ ແອດີ ວິນເທ ມີວາດຊົງຄ່ຽມຄົມທີ່ສຸດ... ໄວໆຂຶ້ນແດ່, ບົນ. ຂ້ອຍບໍ່ຢາກປ່ອຍໃຫ້ນົກບິນໜີຈາກຮັງໄປ ອີກຄາວດຽວ ຂ້ອຍກໍຈະຮູ້ວ່າ "ສາດສະດາຈານງູ" ຫລົບຕົວໄປຢູ່ໃສ. ບັກຫລານຂອງເກົ້ານີ້, ຈະຕ້ອງອ້າປາກບອກ. ພວກເຮົາຈະແກ້ເຜັດກັບຄົນຫົວແຫລມຜູ້ນັ້ນ ເພື່ອຮູບຮ່າງອຸບາດຂອງພວກເຮົານີ້, ເພື່ອອຸບາຍໝາຍຂ້າເຈົ້າແລະ ເພື່ອທຸກສິ່ງທຸກຢ່າງ...

ພວກເຮົາກົກຂາຍ່າງໄປເລື້ອຍໆ. ພວກເຮົາເລີ່ມຕົ້ນເປີດສາກການເສັງແລ່ນໄປສູ່ຄະລືຫາດຂອງໂຣນເຊີ.

# ຕອນທີ່ສິບສອງ

## I

ເມື່ອຂ້າພະເຈົ້າແລະວານດິກໄປເຖິງຄະລີຫາດນັ້ນ ມັນກໍເປັນເວລາຄ່ຳແລ້ວ. ແສງດອກໄຟຢູ່ຊັ້ນເທິງຮຸ່ງສະຫວ່າງສະໄຫວຢູ່. ຂ້າພະເຈົ້າແນມເຫັນຄົນຜູ້ຫນຶ່ງພໍເປັນເງົາຢູ່ຂ້າງປະຕູຮົ້ວ. ພວກເຮົາຫຍັບເຂົ້າໄປໃກ້ກ່ວາເກົ່າ. ນັ້ນແມ່ນ ລຸງ ມິກລີ, ແລະລຸງນີ້ກໍພວມຈ້ອງມອງເບິ່ງພວກເຮົາຢູ່. ຫມາບັກກິບຫັງຂຶ້ນເພາະມັນດີໃຈແລ້ວແລ່ນເຂົ້າມາຫາຂ້າພະເຈົ້າ.

- ມຶງສະບາຍດີຢູ່ຕິກິບ, - ຂ້າພະເຈົ້າລູບຄຳຫມາ.

ວານດິກກໍທັກທາຍຫມາເຊັ່ນກັນ. ຫມໍເອົາຂອງຢ່າງຫນຶ່ງແຊບໆອອກມາຈາກຖົງແລ້ວຍັດໃຫ້ມັນ.

- ເຈົ້າເອງຫວະ ເຊມຸຍແອນ ທີ່ຮັກແພງ? - ມິກລີ ເດ່ມືອອກມາໃຫ້ ແລະເວົ້າດ້ວຍຄວາມຕື່ນເຕັ້ນ. - ຈັ່ງແມ່ນດີໃຈ! ປານນັ້ນ ທ່ານ ໂດບີ ກໍຍັງວິຕົກນຳເຈົ້າເອົາແທ້ເອົາວ່າ ...

- ເຮົາຮູ້ແລ້ວລະວ່າທ່ານໂດບີຂອງເຈົ້າເປັນຄົນແບບໃດ! - ຂ້າພະເຈົ້າຕອບຢ່າງຂຸ່ນເຄືອງແລະຈັບມືມິກລີ ດ້ວຍຄວາມເຢັນຊາ.

ລຸງນັ້ນແນມຈົ້າຈີ້ເບິ່ງຂ້າພະເຈົ້າ.

- ເປັນການດີແລ້ວ, ເຊມຸຍແອນເອີຍ, ແມ່ນແທ້ເຈົ້າຄວນຮູ້ຈັກແຕ່ດົນແລ້ວ ... - ຫລັງຈາກນັ້ນລຸງກໍຫັນຄວາມສົນໃຈໄປຍັງວານດິກ. - ເຈົ້າພາໃຜມາລະຫັ້ນ?

ດ້ວຍທ່າທາງເຊີ້ຊ້າຂອງຕົນ, ວານດິກຫັນໃຈຍາວຫືດໆແລະປົດຫມວກແງັບຄຶງຂຶ້ນໃສ່ເທິງຫົວຂອງຕົນ.

- ສະບາຍດີທ່ານ ຂ້ອຍເປັນກຳມະກອນບໍ່ກ່ານເກົ່າຄົນຫນຶ່ງທີ່ເວສະລີ. ຂ້ອຍໄດ້ຂຸດຄົ້ນເອົາເຊມຸຍແອນຂອງພວກທ່ານຂຶ້ນມາຈາກພົ້ນບໍ່ຮ້າງພຸ້ນ. ມື້ວານນີ້ ບໍ່ກ່ານເຈື່ອນຍ້ອນດິນໄຫວເລັກນ້ອຍ. ຕ້ອງຂຸດຢູ່ຕັ້ງດົນດົນ. ອີກຢ່າງຫນຶ່ງມັນບໍ່ແມ່ນ ເຊມຸຍແອນ ພາຂ້ອຍມານີ້, ແຕ່ມັນແມ່ນຂ້ອຍຢາກມາມອບຕົວ ຊາຍຫນຸ່ມຄົນນີ້ໃຫ້ເຈົ້ານາຍຂອງລາວ, ເວົ້າດ້ວຍຄວາມຈິງໃຈແລ້ວ, ຂ້ອຍຢາກຈະໄດ້ຮັບລາງວັນດ້ວຍການລັງງສະຫລອງເຫລົ້າຂາວຈັກເທື່ອໃນຖານະທີ່ໄດ້ຊິດຊ່ວຍເອົາຄົນຜູ້ຫນຶ່ງນັ້ນຄືນມາໄດ້...

- ຕ້ອງໄດ້ລາຍງານເລື່ອງເຈົ້າໃຫ້ທ່ານ ໂດບີ ຮູ້ກ່ອນ, - ມິກລີ ພຶມພຳ, ຕາແນມສອດໄປເບິ່ງກະຕິກໃສ່ນ້ຳທີ່ພວມໄກວຕ່ອງແຫລ່ງຢູ່ກັບສາຍຮັດຂອງວານດິກ. - ເພິ່ນວິຕົກນຳເຊມຸຍແອນ ທີ່ສຸດ ...

- ທ່ານ, ບໍ່ຈຳເປັນຈະລົບກວນເຈົ້າເພື່ອໄປລາຍງານວຽກໃຫ້ດອກ. - ວານດິກຫາງຽງຕົວເວົ້າດ້ວຍຄວາມສຸພາບທີ່ສຸດ. - ປະກົດວ່າເຈົ້າພວມລໍໃຜຄົນຫນຶ່ງຢູ່ບໍ່ແມ່ນຫວະ?

- ບາງທີອາດຈະແມ່ນ - ມິກລີ ຕອບແລ້ວກໍແນມໄປຍັງຄວາມມືດຢູ່ທາງລຸ່ມທາງກະຫນົນພຸ້ນເຊິ່ງຂະນະນີ້ເປັນການຍາກທີ່ຈະຈຳແນກສິ່ງຕ່າງໆໄດ້.

- ຫັ້ນ, ເຈົ້າກໍຮູ້ແລ້ວວ່າບໍ່ຄວນຈະຫ່າງເຫີນຈາກຫນ້າທີ່ໄປ. - ວານດິກເວົ້າດ້ວຍສຽງອ່ອນນຸ່ມນວນ. - ນອກນັ້ນ, ກໍປະກົດວ່າເຈົ້ານາຍຂອງເຈົ້າເປັນໂລກຫົວໃຈແລະປະຈຸບັນນີ້ເສັ້ນປະສາດບໍ່ຄ່ອຍຈະປົກກະຕິດີພໍເທົ່າໃດ. ການບອກຂ່າວໃຫ້ເຈົ້ານາຍເພິ່ນຮູ້ຢ່າງກະທັນຫັນກ່ຽວກັບການກອບກູ້ເອົາເຊມຸຍແອນຄືນມານີ້ອາດເປັນເລື່ອງບໍ່ຮອບຄອບ...

ລຸງ ມິກລີ ຄຶດແລ້ວງຶກຫົວ.

- ບາງທີ, ເຈົ້າອາດເວົ້າຖືກ. - ລຸງທັນໃຈຍາວ. - ເອີ, ຈັ່ງຊັ້ນລະ! ເອົາໄດ້ແລ້ວ. ເຊມຸຍແອນເອີຍ, ເຈົ້າຜ່ານໄປທາງເຮືອນຄົວຫັ້ນ, ລູກກູນແຈສຽບຢູ່ໃນຫນ່ວຍຂອງມັນຫັ້ນເດີ...

ຂ້າພະເຈົ້າແລະວານດິກພ້ອມກັນຍ່າງຂ້າມປະຕູຮົ້ວເຂົ້າໄປ. ມິກລີ ຍັງຄົງຢືນຢູ່ຂ້າງຫັ້ນ.

ຂະນະທີ່ຂ້າພະເຈົ້າໄຂປະຕູເຂົ້າເຮືອນຄົວນັ້ນ, ວານດິກກິດສຽງຊິ່ມໃສ່ຫູຂ້າພະເຈົ້າວ່າ:

- ນີ້, ເກີງຈັ່ງໃດກໍຄວນສົງສານລາວແດ່. ເລື່ອງທີ່ເຈົ້າຈະປະກົດຕົວຂຶ້ນຕໍ່ຫນ້າ ໂຣນເຊີ ຢ່າງກະທັນຫັນນັ້ນ, ຄວາມຈິງແລ້ວ ອາດຈະເປັນການຂ້າລາວທາງອ້ອມກໍເປັນໄດ້. ເພາະລາວເຊື່ອວ່າ ໄດ້ຫວິດມັ້ນຈາກເຈົ້າໄປຕະຫລອດການແລ້ວ. ຈົ່ງພາຂ້ອຍໄປຫາຫ້ອງຂອງລາວ...ຂ້ອຍຈະເຂົ້າກ່ອນ. ຂ້ອຍຈະເວົ້າແລະກະກຽມໄວ້ກ່ອນ. ແລ້ວຫລັງຈາກນັ້ນເຈົ້າຈຶ່ງເຂົ້າໄປ...

ບັນຫານີ້ສະແດງວ່າເຫມາະທັງນັ້ນ.

- ໄດ້, - ຂ້າພະເຈົ້າຕອບ. - ເຈົ້າຂຶ້ນໄປກ່ອນສາ. ຂ້າພະເຈົ້າເປີດໄຟຟ້າຢູ່ລະບຽງ. ພວກເຮົາຍ່າງໄປຫາຂັ້ນໄດ.

- ຢູ່ຊັ້ນເທິງນັ້ນມີສາມຫ້ອງ, - ຂ້າພະເຈົ້າເວົ້າ. ຖ້າບໍ່ເຫັນລາວຢູ່ຫ້ອງທີ່ສອງ, ກໍຫມາຍຄວາມວ່າລາວຢູ່ໃນຫ້ອງທິດລອງ...

ວານດິກ ງຶກຫົວຢ່າງງຽບໆ. ເຂົາໄຂປະຕູເຂົ້າໄປໃນຫ້ອງທີ່ຫນຶ່ງແລະກໍພ້າວໂບກມືສັນຍານໃຫ້ຂ້າພະເຈົ້າ. ຂ້າພະເຈົ້າເຂົ້າໃຈວ່າທ່ານເຈົ້າຂອງຄະລີນິກທາດພວມຢູ່ໃນຫ້ອງທີ່ສອງນັ້ນ.

- ລຸງ ມິກລີ, ເຈົ້າຫາວະ? - ສຽງຂອງ ໂດບີ ດັງກ້ອງອອກມາ. ເອີ...ເລື່ອງວຽກເປັນຈັ່ງໃດແລ້ວ?

- ດີຫລາຍ, ທ່ານ, - ວານດິກ ຕອບໄປຢ່າງທຸ່ນທ່ຽງທີ່ສຸດ ຫລັງຈາກທີ່ໄດ້ຊີ້ມບອກໃຫ້ຂ້າພະເຈົ້າຢູ່ໃນຫ້ອງທີ່ຫນຶ່ງນັ້ນກ່ອນ, ເຂົາກໍຫມອກແງັບໄວ້ໃນມືແຫນ້ນໆ, ກ້າວເຂົ້າໃນຫ້ອງຂອງໂດບີ ໄປ.

ຂ້າພະເຈົ້າຫຍັບໄປໃກ້ປະຕູທີ່ສຸດ. ຜ່ານຈາກຫວ່າງປະຕູກ້ວາງໆນັ້ນ ຂ້າພະເຈົ້າແນມເຫັນທຸກສິ່ງທີ່ເປັນຫນ້າສົນໃຈຍິ່ງສຳລັບຂ້າພະເຈົ້ານັ້ນໄດ້ດີ.

ໃນຫ້ອງເຮັດວຽກ, ເຕົາຜີງລຸກໄຫມ້ແດງຮູນໆຢູ່. ໂດບີນັ່ງຢູ່ຕໍ່ຫນ້າເຕົາຜີງ. ເພິ່ນແຕ່ງຫນວດກ້ຽງເກົາດີ, ຫວີຜົມຮຽບຮ້ອຍ, ນຸ່ງຊຸດເດີນທາງສີຂີ້ເທົ່າ ແລະສູບກອກທີ່ມີກອກຢາກອກຫນຶ່ງສຽບໃສ່. ກ່ອນເວລາທີ່ວານດິກຈະປະກົດຕົວນັ້ນ, ປະກົດວ່າເພິ່ນຈັບເອົາເຈ້ຍອັນໃດອັນຫນຶ່ງຂຶ້ນມາຈາກໂຕະນ້ອຍທີ່ຢູ່ທາງຂ້າງນັ້ນທັງຄຶ້ນຄຶດ, ທັງຈີກມັນອອກມຸ່ນໆແລ້ວກຶ້ນໃສ່ໄຟ.

ເຈ້ຍລຸກວີ່ຂຶ້ນຈົນສາມາດແນມເຫັນ ວານດິກ. ໂດບີ ເງີກຕົວໃສ່ຫລັງຕັ່ງແດ່ເລັກນ້ອຍ. ຂ້າພະເຈົ້າແນມເຫັນໃບຫນ້າຂອງເພິ່ນມີແວວປະຫລາດໃຈປະກົດຂຶ້ນແວບຫນຶ່ງ. ແຕ່ເລື່ອງນີ້ມັນເກີດຂຶ້ນພຽງຊົ່ວພິບຍາມເທົ່ານັ້ນ. ແລະເພິ່ນກໍແນມເບິ່ງ ວານດິກ ດ້ວຍທ່າທາງທີ່ເກືອບຈະວ່າບໍ່ສົນໃຈເລີຍ.

ຂ້າພະເຈົ້າແນມບໍ່ເຫັນຫນ້າຂອງວານດິກ, ແຕ່ໄດ້ຍິນສຽງປາກຂອງເຂົາ.

- ສະບາຍດີທ່ານ, - ວານດິກ ເວົ້າພາຍຫລັງທີ່ກ້າວໄປຮອດເຕົາຜີງແລ້ວ.

- ສະບາຍດີທ່ານ, ຮຽນທ່ານສາດສະດາຈານ ໂຣນເຊີ, - ເຂົາເນັ້ນຫນັກ.

- ເອີ, ຈັ່ງຊັ້ນຫວະ! - ໂດບີ ຕອບ. ໃນດວງຕາຂອງເພິ່ນມີຮອຍຍິ້ມອາຄາດປະກົດແວັບຂຶ້ນມາ. - ສະບາຍດີ...

- ຂ້າພະເຈົ້າຈື່ທ່ານໄດ້ທັນທີ, ຮຽນສາດສະດາຈານ ໂຣນເຊີ. - ວານດິກເລີ່ມກະລິກວິກວິນຂຶ້ນກ່ວາເກົ່າ, ມືຈັບຢູ່ທີ່ຫລັງຕັ່ງ. ໂດຍບໍ່ກ້າໃຫ້ເຊີນ, ເຂົານັ່ງລົງຢູ່ຟາກໂຕະເບື້ອງນັ້ນ, ເຊິ່ງຫນ້າກັບໂຣນເຊີ-ໂດບີ.

- ແມ່ນ, ເຮົາຢູ່ນີ້ແລ້ວ, - ເພິ່ນຕອບ, ຮອຍຍິ້ມນັ້ນປະກົດອອກມາໃນສຽງປາກ. - ເຮົາສາມາດຈະຈື່ເຈົ້າໄດ້ທັນທີ, ວານດິກ, ໂດຍອີງໃສ່ການປະພຶດຕົວຂອງເຈົ້າ. ໃນໄລຍະຫລາຍມື້ມານີ້ ເຈົ້າມາກ້ຽວວອງວຽນໆຢູ່ອ້ອມແອ້ມເຮືອນຫລັງນີ້. ເຮົາຂໍສາລະພາບວ່າ ເຮົາພວມລໍຖ້າເຈົ້າຢູ່, ບໍ່ໄວກໍຊ້າເຈົ້າຈະຕ້ອງມີຄວາມກ້າພໍແລະກໍຈະມາຫລິ້ນເກມເປີດເຜີຍຢູ່ນີ້ກັບເຮົາ...

ວານດິກ ຂະຍິກບ່າ.

- ແປກເວີຍ!... ຂ້າພະເຈົ້າມີຈຸດປະສົງອັນເຄັ່ງຮ້ອນທີ່ສຸດກັບທ່ານ. ແຕ່ເອົາລະ, ຖ້າທ່ານຕ້ອງການຫລິ້ນກໍຫລິ້ນກັນເບິ່ງ! ເຊີນທ່ານຫລິ້ນກ່ອນ, ສາດສະດາຈານ ໂຣນເຊີ!

ສາດສະດາຈານຈັບເອົາເຈ້ຍສອງສາມໃບຂຶ້ນມາຈາກໂຕະ, ຈີກອອກ, ກົ້ມໃສ່ໄຟແລ້ວແນມເບິ່ງແປວໄຟພວມໄຫມ້ແລັບໆໃສ່ມັນນັ້ນຢູ່ດ້ວຍຄວາມໂສກເສົ້າ. ຫລັງຈາກນັ້ນ ເພິ່ນກໍເຮັດຕາຫີບເຂົ້າ, ແລ້ວຫົວ.

- ເຮົາຈະບໍ່ຮັບຜິດຊອບຕໍ່ການປ່ຽນແປງຂອງໃບຫນ້າເຈົ້າ, ເລື່ອງນີ້ ເຈົ້າເອງເປັນຜູ້ມີຄວາມຜິດ. ແລ້ວເລື່ອງນີ້ ເຈົ້າເອງກໍຮູ້ດີແລ້ວ. ວານດິກ, ຮອດທີຂອງເຈົ້າແລ້ວ!

ວານດິກເບະສົບຫົວ.

- ແຕ່ທ່ານໄດ້ເຮັດໃຫ້ຂ້າພະເຈົ້າເກືອບຈະຖືກໂທດຍ້ອນຄະດີຄາດຕະກຳຂອງທ່ານ...

- ຖ້າເຈົ້າຫວິດຈາກການກ່າວໂທດ, - ສາດສະດາຈານຫົວ - ແລ້ວຄຳຮຽກຮ້ອງຕ້ອງການຕ່າງໆຕໍ່ເຮົາມັນກໍເປັນເລື່ອງໄຮ້ຄວາມຈິງທັງນັ້ນ, - ເພິ່ນແກ້ງຫັນໃຈຍາວແລ້ວເວົ້າຕໍ່: - ມັນເປັນເລື່ອງທີ່ຜ່ານພົ້ນໄປແລ້ວ.

ວານດິກແກວ່ງຫົວເຍາະເຍີ້ຍ.

- ນີ້, ສາດສະດາຈານ ໂຣນເຊີ! ຂ້າພະເຈົ້າເປັນຄົນມັກພຶດຕິການຕົວຈິງ. ແຕ່ຂ້າພະເຈົ້າກໍຮັກຫອມທິດສະດີດ້ວຍຄວາມສຸດຈະຫລິດໃຈແລະສົນໃຈກ່ຽວກັບລາຍລະອຽດ ຈຳນວນຫນຶ່ງ. ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງໄດ້ລົບກວນຈິດໃຈຂອງທ່ານໃນເວລາທີ່ບໍ່ເຫມາະສົມນີ້. ຂໍທ່ານຈົ່ງໃຫ້ອະໄພ, ແຕ່ຂ້າພະເຈົ້າເກງວ່າຈະມາຊ້າ. ສະພາບແວດລ້ອມບາງຢ່າງບັງຄັບໃຫ້ຂ້າພະເຈົ້າມີຄວາມຮີບຮ້ອນ... ດຽວນີ້ດິນຟ້າອາກາດອົບອຸ່ນດີທີ່ສຸດ. ຢູ່ທີ່ຕົວເມືອງຂ້າພະເຈົ້າໄດ້ແນມເຫັນທໍ່ຄວັນຢູ່ເທິງຄະລືຫາດນີ້ ພົ່ນຄວັນອອກມາຄືກັບເຕົາຈູດສົບແຫ່ງຫນຶ່ງ. ແລ້ວຄົນໃຊ້ຂອງທ່ານກໍພວມຮ້ອນໃຈລໍຄອຍລົດໂອໂຕຄັນຫນຶ່ງທີ່ໄດ້ນັດເອົາໄວ້ແລ້ວ. ບາງທີຫລັງຈາກນີ້ຊົ່ວໂມງຫນຶ່ງຂ້າພະເຈົ້າກໍອາດຈະບໍ່ໄດ້ພົບທ່ານນະທີ່ນີ້ອີກແລ້ວ.

ສາດສະດາຈານ ໂຣນເຊີ ວາງສອບກອກຢາລົງແລະໃຊ້ນິ້ວມືເຂາະໆຢູ່ເທິງໂຕະ.

- ຫື, ນັ້ນມັນແມ່ນເລື່ອງຕ່າງ. ເອີ... ຫົວເລື່ອງຂອງການໂອ້ລົມມັນໄດ້ປ່ຽນແປງໄປແລ້ວ. ເຮົາພໍໃຈທີ່ຈະໄດ້ໂອ້ລົມກັບເຈົ້າຢ່າງເປີດອົກເປີດໃຈ. ເຈົ້າຮູ້ບໍ່ວ່າເຮົາເບື່ອເຈົ້າເຖິງພຽງໃດ, ວານດິກ? ນັບແຕ່ມື້ທີ່ເຈົ້າປະກົດຕົວຂຶ້ນຢ່າງກະທັນຫັນຢູ່ທີ່ ມາຊາດລານ ແລະກົ້ມຫນ້າຂໍຮ້ອງໃຫ້ເຮົາຮັບເອົາໄວ້ເປັນຄົນໃຊ້ນັ້ນ... ເຮົາກໍຮູ້ແລ້ວ, ເອີ... ເຮົາຕວງໄດ້ທັນທີວ່າ ເຈົ້າຕ້ອງການຮູ້ຈັກບ່ອນຢູ່ຂອງອາວເຮົາ. ແຕ່ເຮົາກໍຮັກສາສັດຈະກັບເພິ່ນ...

- ຄັນຊັ້ນທ່ານຈະບໍ່ບອກເຮົາແມ່ນເບາະ? - ວານດິກເວົ້າຢ່າງໂມໂຫ.

- ບໍ່ ແມ້ແຕ່ໃນກໍລະນີທີ່ເຈົ້າຈະເອົາຫຍັງໆມາຂົ່ມຂູ່ເຮົາກໍຕາມ ເຮົາມັນບໍ່ແມ່ນລຸ້ນໄກ່ອ່ອນ. ວານດິກ, ໃນເກມໄພ້ທີ່ເຈົ້າຫລິ້ນນຳເຮົາຢູ່ນີ້, ຫມາກໄພ້ຢູ່ໃນມືຂອງເຈົ້າມັນບໍ່ແມ່ນຈັອກເກີ ແລະກ່ອນທີ່ເຈົ້າຈະທັນຈົ້ມຫມາກຕາງົວເກີກຂອງເຈົ້າອອກມານັ້ນ ເຮົາກໍໃຫ້ເຈົ້າຊົມລົດຂອງໃບໄພ້ຫົກແຕ້ມໄປແລ້ວ. ເຮົາເບື່ອເຈົ້າຫລາຍແລ້ວ. ເຈົ້າສົນໃຈເຖິງຈົດຫມາຍທາງໄປສະນີຂອງເຮົາ. ແຕ່ເຈົ້າກໍຄ້ວາຈົດຫມາຍຂອງອາວເຮົາບໍ່ໄດ້ພໍສະບັບ. ແມ່ນບໍ່? ເຮົາຮັບຈົດຫມາຍເຫລົ່ານັ້ນຢູ່ໃນກັບຢາສູບໂດຍແມ່ນບັກນ້ອຍ ເປເດີເຣີ ເອົາມາຈາກໂຕະຂາຍຢາ - ແລະເຈົ້າກໍໄດ້ຄົ້ນຄ້ວາຮອດກະທັ້ງຄໍລຳຢູ່ໃນຫນັງສືພິມສະບັບຕ່າງໆທີ່ສົ່ງມາທາງໄປສະນີນັ້ນ. ເຈົ້າຍັງໄດ້ຊອກຄົ້ນຫາຄວາມຫມາຍລັບໃນແຖວຫນັງສືຕ່າງໆທີ່ເຮົາໃຊ້ສໍດຳຂີດກ້ອງ

ໄວ້ເພື່ອແກ້ງເຮັດຍອກເຈົ້ານັ້ນ. ເອີ... ເຮົາຢາກຫົວຂວັນເຈົ້າຫລາຍ, ວານດິກ! ແຕ່ເຈົ້າມີຄວາມຜິດທີ່ໃຫຍ່ຫລວງຢູ່ຢ່າງຫນຶ່ງຄືໃນຂະນະທີ່ລັກຕິດຕາມການຄົ້ນຄ້ວາທາງວິທະຍາສາດຂອງເຮົາ. ເຈົ້າໄດ້ຫລອຍໄປໄຂຕູ້ເຄື່ອງທົດລອງ, ຫລັງຈາກທີ່ມາເຮັດວຽກໃຫ້ເຮົາໄດ້ພຽງອາທິດດຽວ, ເຈົ້າຈື່ໄດ້ບໍ່? ນະທີ່ນັ້ນເຈົ້າໄດ້ເຮັດຫລອດແກ້ວບັນຈຸວິຣຸດອັນຫນຶ່ງແຕກ, ເຈົ້າຕິດພະຍາດແລະໃນຂະນະນັ້ເຈົ້າພວມຖືກລົງໂທດ. ຖ້າເຈົ້າຊ່ວຍວຽກນັກຊີວະສາດ ຫລືນັກເຄມີສາດຜູ້ຫນຶ່ງ ແລ້ວເຈົ້າກໍຄວນທີ່ຈະຢູ່ໃນໂອວາດຂອງລາວເພື່ອຫລີກລ່ຽງກໍລະນີເຄາະຮ້າຍຕ່າງໆ. ໃນການຕິດພະຍາດນີ້ ແມ່ນເຈົ້າມີໂທດຕໍ່ເຈົ້າເອງ. ເມື່ອເຮົາວາງເງື່ອນໄຂແກງຫນວດໃຫ້ແກ່ເຈົ້ານັ້ນແມ່ນເຮົາໄດ້ແນມເຫັນບັນຫານັ້ນໄວ້ລ່ວງຫນ້າແລ້ວ. ປະກົດວ່າການຄາດຄະເນຂອງເຮົາແມ່ນຖືກຕ້ອງ, ເພາະໃນເມື່ອແນ່ໃຈແລ້ວວ່າ ເຈົ້າໄດ້ສ້າງຄວາມເສຍຫາຍໃຫ້ແກ່ການສະສົມວິຣຸດຂອງເຮົາແລະໃບຫນ້າຂອງເຈົ້າເອງນັ້ນແລ້ວ, ເຮົາກໍໄດ້ປັ້ນເຫດຜົນອັນໃດອັນຫນຶ່ງຂຶ້ນມາສະເຫນີໃຫ້ເຈົ້າສີດຢາ, ແຕ່ເຈົ້າກໍປະຕິເສດ.

ວານດິກນັ່ງງຽບຢູ່, ສ່ວນຂ້າພະເຈົ້ານັ້ນກໍໄດ້ແຕ່ຄິດວ່າຫມໍນາຍພານນິກຄົນນີ້ຍັງບໍ່ໄດ້ເປີດເຜີຍທຸກສິ່ງທຸກຢ່າງອອກມາສູ່ຂ້າພະເຈົ້າຟັງ ໃນລະຫວ່າງທີ່ໂອ້ລົມກັບຂ້າພະເຈົ້າຢູ່ທີ່ປ່າຊ້ານັ້ນ.

- ແລ້ວຂະນະນັ້ນເຮົາກໍຢາກລົງໂທດເຈົ້າແດ່, ວານດິກ, ດ້ວຍວິທີລົງໂທດທີ່ເຮັດໃຫ້ເຈົ້າມີຄວາມຊາບຊຶມທີ່ສຸດ. ເຈົ້າເຂົ້າໃຈເຮົາຫລືບໍ່? - ສາດສະດາຈານກາວດ້ວຍນ້ຳສຽງທີ່ມີຄວາມຫມາຍຍິ່ງ.

- ຍັງບໍ່ແນ່ວ່າໃຜກັນແທ້ຈະເປັນຜູ້ຖືກລົງໂທດຢ່າງຈິງຈັງ, - ວານດິກ ຍືດຕົວຊື່ງຂຶ້ນຢູ່ເທິງຕັ່ງແລ້ວຕອບດ້ວຍຄວາມຫນັກແຫນ້ນ ແລະເຄັ່ງຂຶມ - ເຖິງແມ່ນຂ້າພະເຈົ້າຈະເຮັດໃຫ້ທ່ານເບື່ອຫນ່າຍເຕັມທົນແລ້ວກໍຕາມ, ແຕ່ຂ້າພະເຈົ້າກໍອາດຈະຍອມຮັບໃຊ້ທ່ານ, ຖ້າທ່ານຫາກຊ່ວຍໃຫ້ຂ້າພະເຈົ້າໄດ້ພົບກັບອາວຂອງທ່ານ.

- ເຮົາບໍ່ຕ້ອງການການຮັບໃຊ້ຂອງເຈົ້າ, - ສາດສະດາຈານເວົ້າດ້ວຍຄວາມຂຸ່ນເຄືອງແລະປະກົດວ່າເພິ່ນຫງ່ວມເຫງົາແດ່ເລັກນ້ອຍ.

- ໂອທ່ານ, ຂໍຢ່າຟ້າວວູ່ວາມ! - ວານດິກຫົວ. - ແລະກໍຫວັງວ່າທ່ານຈະຕົກລົງແບບ

ງ່າຍດາຍກ່ວາເກົ່າ. ຈົ່ງບອກບ່ອນຢູ່ຂອງອາວທ່ານໃຫ້ຂ້າພະເຈົ້າຮູ້ ແລ້ວຂ້າພະເຈົ້າກໍຈະຫາຍໜ້າໄປຈາກເສັ້ນທາງທີ່ທ່ານພວມເດີນຢູ່ນີ້.

- ຖ້າເຮົາບໍ່ເວົ້າເດລະ? - ສາດສະດາຈານຫົວຂຶ້ນດ້ວຍອາດທີ່ບໍ່ຄ່ອຍຈະມ່ວນໃຈພໍເທົ່າໃດ.

ວານດິກ ລຸກໂຢ້ເຍາະຂຶ້ນຈາກຕັ່ງນອນ.

- ຂ້າພະເຈົ້າຈະແຈ້ງຄວາມໃຫ້ຜູ້ທີ່ຄວນຈະແຈ້ງຮູ້ຈັກ, - ເຂົາແຜດສຽງຂຶ້ນມາຢ່າງມີຄວາມໝາຍ, - ວ່າທ່ານໄດ້ຝັງຄົນໃຊ້ຂອງຕົນຊື່ວ່າ ເຊມຸຍແອນ ປີນ ຢູ່ໃຕ້ພື້ນບໍ່.

ສາດສະດາຈານສັກຂະໂຍງຂຶ້ນຈາກຕັ່ງ.

- ຂີ້ຕົວະ! ເຮົາປະພຶດຕົວດີກັບຊາຍໜຸ່ມຜູ້ນັ້ນສະເໝີມາ. ເຮົາບໍ່ມີເຫດຜົນຫຍັງຈະໄປທຳເຊັ່ນນັ້ນກັບເຂົາ.

ຫົວໃຈຂອງຂ້າພະເຈົ້າປະກົດວ່າຢຸດເຕັ້ນເມື່ອໄດ້ຍິນຄຳເວົ້າເຫລົ່ານັ້ນ. ຄວາມຄຽດຂຶ້ນຂອງຂ້າພະເຈົ້າມັນເສື່ອມສະຫລາຍໄປຄືກັບຫິມະໃນລະດູບານໃໝ່. ສາດສະດາຈານເອົາສອງມືຂຶ້ນມາງຸມຫົວ.

- ຫື... ໝາຍຄວາມວ່າທ່ານໄດ້ທຳທ່າແລ່ນອ້ອງເຕັ້ນປົບພຸ້ນປົບພີ້ເພື່ອຊອກເອົາເສດກະດູກຂອງຄົນຜູ້ນັ້ນແມ່ນບໍ່? ຄົນຜູ້ໜ້າສົງສານເອີຍ! ຢ່າງໃດກໍຕາມ, ທ່ານຈະປະຕິເສດໂທດວາງອຸບາຍຂ້າລາວກໍຍັງຍາກກ່ວາຂ້າພະເຈົ້າປະຕິເສດໂທດຂ້າຄົນຢູ່ ມາຊາດລານ ນັ້ນ ຖ້າໃນຂະນະນັ້ນ ຂ້າພະເຈົ້າຫາກຕົກເຂົ້າໃນກຳມືຂອງສາລະວັດ. ຟ້າເອີຍ! ຂໍແດ່ພະຜູ້ເປັນເຈົ້າຈົ່ງຊ່ວຍກອບກູ້ເອົາວິນຍານຂອງຜູ້ທີ່ໄດ້ລ່ວງລັບໄປແລ້ວ! ແລ້ວວານດິກກໍປ່ຽນສຽງ: - ບອກບ່ອນຢູ່ຂອງອາວທ່ານມາສາ, ສາດສະດາຈານ.

ເມື່ອໄດ້ຍິນຄຳເວົ້າເຫລົ່ານັ້ນ, ຂ້າພະເຈົ້າບໍ່ອາດຈະຫັກຫ້າມຕົນເອງໄວ້ໄດ້ອີກ, ດັ່ງນັ້ນຈຶ່ງຟ້າວຍ່າງເຂົ້າໄປໃນຫ້ອງ.

- ວານດິກ, ຕົວະສາດສະດາຈານສ່ຳນັ້ນກໍພໍແລ້ວ, - ຂ້າພະເຈົ້າເວົ້າ. - ສະບາຍດີທ່ານ, - ຂ້າພະເຈົ້າໂນ້ມຕົວໄປຫາສາດສະດາຈານແລະດຶງກອກອອກມາຈາກກົງ. - ທ່ານ, ຂໍທ່ານຈົ່ງໄດ້ອະນຸຍາດໃຫ້ຂ້າພະເຈົ້າສົ່ງວັດຖຸນ້ອຍໆນີ້ຄືນໃຫ້ທ່ານ.

ສາດສະດາຈານ ວາແຂນອອກດ້ວຍຄວາມແປກໃຈ.

- ເຊມຸຍແອນ? ເຈົ້າເອງຫວະຫັ້ນ? ຂ້າແດ່ພະຜູ້ເປັນເຈົ້າ, ຂ້ອຍດີໃຈທີ່ສຸດ! ເຈົ້າໄດ້ຊ່ວຍດຶງເອົາຫາບຫນັກງບໍ່ຈັກວ່າເທົ່າໃດອອກໄປຈາກຫົວໃຈຂອງຂ້ອຍ.

ເພິ່ນຈັບບ່າຂອງຂ້າພະເຈົ້າ. ຕາທັງຄູ່ເຊິ່ງເຄີ່ງຄັດຢູ່ຕະຫລອດຂອງເພິ່ນຂະນະນີ້ກາຍມາອ່ອນໂຍນແລະສິດຊື່ນ, ຊຶມຢູ່ກັບນ້ຳຕາແຫ່ງຄວາມກະຕຸ້ນໃຈ.

- ແມ່ນ, ແມ່ນເຈົ້າເອງ, ທ້າວຫນຸ່ມເອີຍ! - ເພິ່ນອ່ວາຍຫນ້າໄປຫາ ວານດິກ. - ຢ່າມາຍອກແບບນີ້, ຄົນອັບປີເອີຍ! ຈົ່ງນັ່ງລົງແລະຢ່າຫວັງຈະຫລົບຕົວໄປຈາກນີ້ໄດ້. ເຮົາຈະບໍ່ປ່ອຍເຈົ້າອອກໄປຕາບໃດ... ເອີ... ເຊມຸຍແອນ, ເຈົ້າກໍຄືກັນນັ່ງລົງ ແລະເລົ່າໃຫ້ຂ້ອຍຟັງເບິ່ງດູ. ນີ້, ເຊມຸຍແອນ, ຂ້ອຍມີໂທດຕໍ່ເຈົ້າ, ຂ້ອຍສາລະພາບວ່າ... ຂ້ອຍມີຄວາມຜິດຢູ່ບ່ອນວ່າໄດ້ອະນຸຍາດໃຫ້ເຈົ້າລົງໄປໃນບໍ່ງວງ ແລະກໍຈະແຈ້ງວ່າມັດຂອດເຊືອກບໍ່ແຫນ້ນ.

- ທ່ານ, ຂໍທ່ານຈົ່ງອຸ່ນອ່ງນໃຈ, - ຂ້າພະເຈົ້າເວົ້າ. ຂ້າພະເຈົ້າຢາກຮູ້ພຽງແຕ່ວ່າພວກກໍາມະກອນໄປຊອກຂ້າພະເຈົ້າຕາມທາງສາຍໃດແດ່ເທົ່ານັ້ນດອກ.

- ເສັ້ນທາງຢູ່ທາງກ້ຳຂວາຂອງອຸໂມງໃຫຍ່, - ສາດສະດາຈານຕອບ. - ມັນເປັນຫີນທາງໃຕ້ດິນທີ່ກວ້າງຫລາຍ. ກ່ອນນີ້ດົນນານມາແລ້ວ ກ່ານທັງຫມົດກືກຂູດຄົ້ນຂຶ້ນມາຈາກບ່ອນນີ້.

- ສ່ວນຂ້າພະເຈົ້າເອົາຕົວລອດອອກມາຕາມເສັ້ນທາງເບື້ອງຊ້າຍ, - ຂ້າພະເຈົ້າອະທິບາຍ. - ຢູ່ຫັ້ນຍັງມີກ່ານເປັນຊັ້ນຫນາງຢູ່, ວິເສດທີ່ສຸດເລີຍ.

ສາດສະດາຈານສິດຊື່ນຂຶ້ນມາຢ່າງເຫັນໄດ້ແຈ້ງ:

- ດີຫລາຍ, ເຈົ້າເລົ່າໃຫ້ຂ້ອຍຟັງຫມົດເບິ່ງດູ, ເຊມຸຍແອນ.

ແຕ່ຂ້າພະເຈົ້າຊ້ຳອ່ວາຍຫົວໄປທາງ ວານດິກ.

- ບໍ່, ກ່ອນອື່ນຫມົດຈົ່ງປ່ອຍໃຫ້ຄົນກ້າມກືງຜູ້ນີ້ເລົ່າໃຫ້ທ່ານຟັງກ່ອນວ່າ, ຢູ່ ມາຊາດລານ ມັນໄດ້ຊຸກໃຜເຂົ້າສູ່ມືສາລະວັດແທນມັນ.

ແລ້ວຂ້າພະເຈົ້າກໍຫັ້ນເອົາຫມວກແງ່ບອອກມາຈາກມືຂອງວານດິກ.

- ນັ່ງຢູ່ດີໆ. ຫ້າມຕິງ! ຈົ່ງເວົ້າຕາມຄວາມຈິງ.

ຕາຫລໍແຫລທັງຄູ່ຂອງ ວານດິກ ຫົບເຂົ້າ.

- ແຕ່ຊິເລົ່າເລື່ອງນັ້ນຄືນມາເຮັດຫຍັງອີກ. ເອີ, ຂ້າພະເຈົ້າໄດ້ຫລິບຕົວໄປຈາກ ມາຊາດລານ, ທ່ານ, ເຊມຸຍແອນ ຕ້ອງຍອມຮັບໂທດແທນຂ້າພະເຈົ້າ...

- ແມ່ນຫຍັງ? - ສາດສະດາຈານຮ້ອງຂຶ້ນ. - ເຊມຸຍແອນບໍ່ໄດ້ເວົ້າຫຍັງເຖິງເລື່ອງນີ້ກັບຂ້ອຍເລີຍ... ສາລະພາບມາສາ, ວານດິກ! ເຈົ້າຢູ້ ເຊມຸຍແອນ ຜູ້ບໍ່ມີຄວາມຜິດເຂົ້າສູ່ເງື້ອມມືຂອງຕຳຫລວດແບບໃດ?

- ຂ້າພະເຈົ້າກໍສາລະພາບແລ້ວເດ, - ວານດິກເວົ້າພຶມໆພ້ອມທັງແນມເບິ່ງຂ້າພະເຈົ້າເພື່ອຊອກຫາຄວາມເຫັນໃຈ. - ແຕ່ກໍ່...

ແລ້ວ ວານດິກກໍໄດ້ເລົ່າເລື່ອງທຸກສິ່ງທຸກຢ່າງທີ່ເກີດຂຶ້ນກັບພວກເຮົາພາຍຫລັງທີ່ສາດສະດາຈານ ໂຣນເຊີຫາຍຕົວໄປຈາກ ມາຊາດລານ ນັ້ນຄືນມາ. ຂ້າພະເຈົ້າກໍໄດ້ເພີ່ມຕື່ມເລື່ອງທີ່ເຂົາເລົ່ານັ້ນຕື່ມອີກ.

- ສາດສະດາຈານໂຣນເຊີເອີຍ, ບັນຫາຂອງມັນມີຢູ່ວ່າ ທ່ານເສຍແຮງເກີນຄວນທີ່ໄດ້ປັ້ນແຕ່ງຄະດີຄາດຕະກຳຂອງຕົນຂຶ້ນແນວນັ້ນ, - ເຂົາກ່າວສະຫລຸບດ້ວຍຄວາມທຸ່ນທ່ຽງກ່ວາເກົ່າແລະຫົວຕາມເຄີຍ.

ສາດສະດາຈານໃຊ້ກຳປັ້ນເຂາະລົງໃສ່ຕັ່ງອີ້ບາດແຮງໆ.

- ພວກຂີ້ສູດ! ພວກເຂົາໄປຊ້າໂພດ! ເພາະຂ້ອຍໄດ້ໂທລະສັບບອກ ແດັນອາໂຣນໂຍແລະທ່ານກົງສູນໃຫ້ຄຸບເອົາຕົວ ກາກເນໂຣໄວ້ໃຫ້ທັນການ...

- ທ່ານຜິດພາດໄປສາແລ້ວ, - ວານດິກຕັດບົດດ້ວຍທ່າທາງຂອງຜູ້ມີໄຊ. - ທ່ານເວົ້າເຖິງກາກເນໂຣເຮັດຫຍັງ? ພຽງແຕ່ເອີ່ຍເຖິງຊື່ຂອງມັນ, ພວກສາລະວັດຢູ່ຫັ້ນກໍຕົບຫນີປີລີບໄປແລ້ວ. ທ່ານຮູ້ບໍ່ວ່າ, ພວກເຂົາຄາດຕຽມປິດລ້ອມເຮືອນຂອງທ່ານເປັນເວລາຕັ້ງສາມຊົ່ວໂມງ. ສ່ວນສຳລັບຂ້າພະເຈົ້າແລ້ວ ບັນຫານັ້ນມັນເຫມາະສົມທີ່ສຸດ. ສາດສະດາຈານ ໂຣນເຊີ, ເວົ້າຕາມຄວາມຈິງ, ຂ້າພະເຈົ້າຄວນຈະຄຸບປີກເສື້ອຂອງທ່ານໄດ້ແຕ່ຫວ່າງຢູ່ໃກ້ແກກວຸດພຸ້ນແລ້ວ...

- ຖ້າເຮົາບໍ່ໂດດລົງຈາກລົດໄຟຢູ່ຂ້າງຂົວເມີຍສະປຣິນໂກແມ່ນດີ, - ສາດສະດາຈານແປງຄວາມ. - ເຈົ້າຍັງຮູ້ເຮົານ້ອຍເກີນໄປ.

- ແຕ່ຂ້າພະເຈົ້າກໍໄດ້ໄລ່ຕາມທ່ານທັນເທິງເຂດ ເດເຕີໂຣຍ, - ວານດິກຫົວ.

- ບໍ່, ເຈົ້ານຳທັນເຄື່ອງບິນຖ້ຽວທີ່ສິບເອັດພຸ້ນດອກ. ສ່ວນເຮົາແມ່ນບິນລ່ວງຂຶ້ນທິດເໜືອ, ຜ່ານໜອງຕ່າງໆແລະນ້ຳຕົກ ນີກາຣາ, ຢູ່ເທິງຖ້ຽວບິນກີລາທີ່ເກົ້າສິບເກົ້າ ... ຢູ່ໜ້າດິນເຈົ້າຍັງປະພຶດຕົວຊົ່ວຊ້ຳກ່ວານັ້ນອີກ. ເປັນຫຍັງຈຶ່ງໄປຢູ້ໄປແຫຍ້ກັນຢູ່ບ່ອນຂາຍປີ້ຫລືຢູ່ໂຕະຂາຍເຄື່ອງ? ຕອນສຸດທ້າຍ. ໃນຂະນະທີ່ແນມເຫັນເຮົານັ້ນ, ເຈົ້າໄດ້ແຫຍ້ເຂົ້າໄປໃນຫ້ອງການ "ເຊົາລາອິນ"... - ສາດສະດາຈານເຮັດໜ້າຫຍຸ້ງເຂົ້າ.

- ແຕ່, ຕາມຮອຍຂອງທ່ານໄປຂ້າພະເຈົ້າໄດ້ຊື້ປີ້ຂຶ້ນກຳປັ່ນ "ອາລີອາສະກາ" ໄດ້, - ວານດິກຫົວແຫ່ງ. - ແຕ່...

- ແຕ່... - ສາດສະດາຈານຫົວ, - ຂະນະນັ້ນເອງ, ປີ້ຂຶ້ນກຳປັ່ນ "ເກຕູກີ" ມັນນອນຢູ່ໃນຖົງຂອງເຮົາແລ້ວ. ເຊີນເຈົ້າແປກໃຈສາ, ວານດິກເອີຍ. - ແລະກໍຢ່າໄດ້ອ້າປາກຕາກເຫືອກອອກມາແບບນັ້ນ. ແຕ່ຂ້ອຍຢາກຖາມ ເຊມຸຍແອນຄວາມໜຶ່ງວ່າ: ເຊມຸຍແອນ, ເປັນຫຍັງ ເຈົ້າຈຶ່ງບໍ່ເອີ່ຍເຖິງເລື່ອງທີ່ເກີດຂຶ້ນຢູ່ ມາຊາດລານພໍຄຳເລີຍ? ເຈົ້າເວົ້າເຖິງອາວຂອງຂ້ອຍຫລາຍປານນັ້ນ ແຕ່ຊ້ຳບໍ່ເວົ້າຫຍັງເຖິງຫລານຂອງເພິ່ນເລີຍ. ເພາະຂ້ອຍເອງ, ເຈົ້າຈື່ໄດ້ດີ, ຂ້ອຍກໍຍັງເຄີຍໄດ້ເຕາະເຕື້ອງເຖິງບັນຫານີ້ຢູ່.

ຂ້າພະເຈົ້າຄຶດຄືນເຖິງເລື່ອງກ່ຽວກັບເພື່ອນໜຸ່ມຂອງ ໂດບີ. ຂະນະນັ້ນ ເພິ່ນປັ້ນເລື່ອງນັ້ນຂຶ້ນມາໄດ້ຢ່າງຄ່ອງແຄ້ວ.

- ທ່ານ, ຕາມສັນຍາ, ຂ້າພະເຈົ້າໄດ້ສັນຍາວ່າຈະບໍ່ຕັ້ງຄຳຖາມນອກເລື່ອງ ຂຶ້ນມາ? - ຂ້າພະເຈົ້າຕອບ. - ແລ້ວຂ້າພະເຈົ້າກໍຖືວ່ານັ້ນແມ່ນພັນທະທີ່ທັງສອງຄົນຈະຕ້ອງປະຕິບັດຕໍ່ກັນ.

- ເອີ... ເຈົ້າເວົ້າຖືກ, - ສາດສະດາຈານຕອບແລະຕອດຫົວໄປທາງວານດິກ. - ເຈົ້າຄຶດທົບທວນທຸກສິ່ງທຸກຢ່າງໄດ້ແລ້ວບໍ່? ຍັງແມ່ນບໍ່? ເຊີນເຈົ້າແປກໃຈອີກຕໍ່ໄປສາວາ ນດິກ, ມາຢູ່ ແອຊູໂອເຣີນີ້, ເຈົ້າກໍຍັງເຮັດໃຫ້ເຮົາເບື່ອອີກຄືເກົ່າ. ເຮົາບໍ່ໃຊ່ຊິແມ່ນດາວດວງໜຶ່ງເພື່ອໃຫ້ເຂົາເຈົ້າສັງເກດເບິ່ງເຮົາດ້ວຍກ້ອງດາລາສາດທຸກໆມື້ເດີ. ເອີ... ເລື່ອງທີ່ເຈົ້າຫລອຍ

ມານີ້ໃນຕອນກາງຄືນນັ້ນໄດ້ເຮັດໃຫ້ລູງ ມິກລີ ຜູ້ບໍລິສຸດພຸດຜ່ອງຂອງເຮົາຫວາດວິຕົກທີ່ສຸດ ! ມື້ນັ້ນ ຖ້າຫາກບໍ່ມີເຊມຸຍແອນແລ້ວພວກເຮົາຈະຊັດເຈົ້າຈົນລອດຕາຍພຸ້ນແຫລະ. ໃນຄືນນັ້ນ ເຊມຸຍແອນ ອອກໄປຍ່າງຫລິ້ນຢູ່ເທິງເດີ່ນ. ແລ້ວລາວກໍເລີຍໄດ້ກິນກ່ຳປັ້ນແທນເຈົ້າ.

ຈະຕ້ອງສາລະພາບວ່າ, ຂະນະນັ້ນຂ້າພະເຈົ້າຢາກຊັດຫນ້າ ວານດິກ ຈົນແຕກໄປພຸ້ນແຫລະ, ແລະຂ້າພະເຈົ້າກໍໄດ້ຍົກກ່ຳປັ້ນຂຶ້ນມາຊູ່ມັນ. ສາດສະດາຈານຍັງຄົງເວົ້າຕໍ່ໄປຢ່າງເຄັ່ງຂຶມ:

- ຈົ່ງເວົ້າກົງໆອອກມາເບິ່ງດູວ່າ, ເປັນຫຍັງເຈົ້າຈຶ່ງຕິດຕາມເຮົາ ? ຢາກຮູ້ບ່ອນຢູ່ຂອງອາວເຮົາ ? ພໍແລ້ວ, ຫຸບປາກຢູ່ສະ, ເຮົາບໍ່ຕ້ອງການໃຫ້ເຈົ້າຕອບອີກ. ແຕ່ຄວນຈະຮູ້ເອົາໄວ້ວ່າເຈົ້າຕິດຕາມເຮົາ, ແຕ່ຄົນຜູ້ຫນຶ່ງທີ່ບໍລິສຸດຕໍ່ເຮົາກໍຕິດຕາມເຈົ້າຢູ່. ເຈົ້າຄິດຈັ່ງໃດລະ, ເຊມຸຍແອນ ? ອາດຈະບອກໃຫ້ລາວຮູ້ຈັກບ່ອນຢູ່ປະຈຸບັນຂອງອາວຂ້ອຍໄດ້ແລ້ວຕິ ? ແບບນັ້ນ ວານດິກຈະຫມົ້ນ ນຳຮອຍຂອງເພິ່ນ ໄປແລ້ວປະໃຫ້ພວກເຮົາໄດ້ຢູ່ຢ່າງສະຫງົບ ?

ຂ້າພະເຈົ້າຄິດວ່າ, ບໍ່ແມ່ນຈະມີແຕ່ ວານດິກ ຜູ້ດຽວທີ່ຈະແລ່ນກະຫລຳໄປຕາມຫາບ່ອນຢູ່ນັ້ນ, ແຕ່ບາງທີຂ້າພະເຈົ້າເອງກໍຈະຕິດຕາມເຂົາໄປ. ຂ້າພະເຈົ້າຕ້ອງການພົບ "ສາດສະດາຈານງູ" ຂອງຂ້າພະເຈົ້າທີ່ສຸດ ແລະຂ້າພະເຈົ້າກໍຈະເລົ່າໃຫ້ເພິ່ນຮູ້ແຈ້ງທຸກໆຢ່າງ.

## II

- ເຈົ້າ, ສາດສະດາຈານ, ທ່ານບອກບ່ອນຢູ່ນັ້ນສາ, - ຂ້າພະເຈົ້າເຫັນດີ.

ວານດິກກູ້ອົງມືສອງກ້ຳ ເພາະແນ່ໃຈຕໍ່ໄຊະນະທີ່ຈະໄດ້ຮັບແລະພຶງຫູອອກມາຟັງ. ສາດສະດາຈານ ໂຮນເຊີ ໂຍ້ຕົວຂຶ້ນຈາກຕັ່ງນ້ອຍຫນຶ່ງແລະງຶກຫົວ.

- ເອີ... ເຮີຍ ທ່ານສຸພາບບຸລຸດເອີຍ, ປະຈຸບັນນີ້ສາດສະດາຈານ ມິນໂຮຍເຊີພວມນັ່ງຢູ່ຕໍ່ຫນ້າຂອງພວກເພື່ອນນີ້ຈັ່ງໃດລະ.

ວານດິກຕົກສະເງີ້ ເພາະຄາດບໍ່ເຖິງ. ສ່ວນຂ້າພະເຈົ້າແມ່ນແປກໃຈແລະຈິດໃຈກໍປ່ຽມລົ້ນໄປດ້ວຍຄວາມສິດຊື່ນຢ່າງບໍ່ມີສິ່ງໃດຈະມາທຽບທຽມໄດ້.

- ແມ່ນຫຍັງ, ສາດສະດາຈານ, ທ່ານເອງຫວະຊັ້ນ ? ເປັນຫຍັງຂ້າພະເຈົ້າຈຶ່ງຈຳທ່ານ

ບໍ່ໄດ້? ຫລືວ່າທ່ານກໍໄດ້ທຳການປ່ຽນແປງຮູບນອກຂອງຕົນ? ເປັນຫຍັງກ່ອນນີ້ທ່ານຈຶ່ງບໍ່ເວົ້າອອກມາ? - ຂ້າພະເຈົ້າຮ້ອງຂຶ້ນ. - ຄັນຊັ້ນເລື່ອງທຸກຢ່າງມັນກໍຄົງບໍ່ເປັນແນວນີ້.

- ເຊມຸຍແອນຈົ່ງມີມານະຈິດຂຶ້ນຕື່ມ, - ມິນໂຮຍເຊີ ຕອບ. - ແມ່ນ, ມັນຄວນຊິເປັນແບບອື່ນ... ແຕ່ກະແສຊີວິດມັນຊ້ຳມີຂອດບັນຫາທີ່ສັບສົນຍິ່ງ. ຈົ່ງມີມານະຈິດ ເຊມຸຍແອນ. ຂ້ອຍຈະຄິດບັນຊີກັບວານດິກກ່ອນ. - ມິນໂຮຍເຊີ ຢືນຂຶ້ນແລະຍ່າງໄປທາງຂ້າງຫມໍ້ນາຍພານນົກທີ່ພວມນັ່ງງຽບຢູ່ເທິງຕັ່ງ. - ຈັ່ງໃດ? ທ່ານທີ່ນັບຖື. ທ່ານຢາກຮູ້ຈັກຄວາມຈິງຫວະ? ທ່ານໄດ້ສະກົດຮອຍເຮົາໄປຢ່າງບໍ່ລົດລະນັບແຕ່ທ່ານເຫັນເຮົາຢູ່ເທິງກະຫນົນນິວຢອກ ເຊິ່ງເປັນເວລາກ່ອນນີ້ສາມປີເຄິ່ງມາແລ້ວ.

- ແມ່ນ. ທ່ານອອກມາຈາກຫ້ອງການ "ໂລຊູກະລີ ລີມິແຕັດ", - ວານດິກ ພຶມພຳ.

- ແມ່ນ, ແມ່ນແລ້ວ, ກ່ອນຈະໄປພະມ້າເຮົາໄດ້ເຊັນສັນຍາກັບບໍລິສັດດັ່ງກ່າວກ່ຽວກັບການສົ່ງພິດງູໄປໃຫ້ມັນ. ແຕ່ຢູ່ທີ່ພະມ້າ ເຈົ້າກໍເຮັດໃຫ້ເຮົາເບື່ອຫນ່າຍ. ຄວາມຈິງແລ້ວ, ເຮົາຊື່ນຊົມທີ່ສຸດເພາະເຈົ້າບໍ່ໄດ້ລຳໄລນຳຜົນປະໂຫຍດຂອງຕົນ, ສະເຫນີຂາຍງູ ເດີຍເຣີ ໃຫ້ພວກເຮົາດ້ວຍລາຄາສາມຫລຽນຕໍ່ໂຕ, ໃນຂະນະທີ່ເຈົ້າຈະຕ້ອງຊື້ມາຈາກປະຊາຊົນໃນທ້ອງຖິ່ນດ້ວຍລາຄາຫ້າຫລຽນຕໍ່ໂຕ. ເລື່ອງນັ້ນມັນເຮັດໃຫ້ເຈົ້າຕ້ອງເປັນຝ່າຍຫລຸບທຶນຢ່າງຈະແຈ້ງ. ເຈົ້າເຮັດສິ່ງນັ້ນໄປບໍ່ແມ່ນຍ້ອນຄວາມງາມອັນລ້ຳເລີດແຫ່ງດວງຕາທັງຄູ່ຂອງນາງລີເຢີ ມິນເຕີນດອກ. ເຖິງແມ່ນວ່າທຳອິດ ຂ້ອຍກໍເຄີຍຄິດເຊັ່ນນັ້ນມາກ່ອນ: ເຈົ້າເຄີຍກົ້ມໆຫມອບໆຢູ່ຕໍ່ຫນ້ານາງລີເຢີ ໃນຂະນະທີ່ນາງຮັບສິນຄ້າຈາກເຈົ້າ. ແຕ່ເມື່ອມີຄັ້ງຫນຶ່ງນາງພົບເຈົ້າຢູ່ຮ່າງກູນ, ເຈົ້າພວມສົ່ງໂທລະເລກໄປຍັງສະຖານທີ່ແຫ່ງຫນຶ່ງທີ່ເຈົ້າຮູ້ຈັກດີ... ແລະຂ້ອຍນີ້ອີກ... ກໍຮູ້ຈັກ...

ມິນໂຮຍເຊີ ກ່າວສຳນວນສຸດທ້າຍຢ່າງເຂັ້ມຂຸ້ນ, ວານດິກກົ້ມຫົວຫລົບຕໍ່ການແນມເບິ່ງແບບຈ້ຳຈີ້ຂອງສາດສະດາຈານ.

- ...ແລ້ວເຮົາກໍປ່ຽນຄວາມຄິດຕໍ່ເຈົ້າຈົນຫມົດ ແລະຮູ້ແຈ້ງວ່າ ວິຊາອາຊີບຂອງເຈົ້າມັນແມ່ນຫຍັງກັນແທ້: ເຈົ້າຈົ່ງຄິດຄືນເຖິງພຶດຕິການຂອງເຈົ້າຢູ່ ແບັນຣັກບໍ. ກະທັ້ງຢູ່ເທິງຊາຍທະເລເຈົ້າກໍຍັງຕິດຕາມເຮົາ. ໃນຂະນະທີ່ລອຍຢູ່ກັບຄົນພວມອາບນັ້ນ ເຮົາກໍຍັງຈຳແນກຮູບ

ຮ່າງຂອງເຈົ້າຢູ່ເທິງຝັ່ງພຸ້ນໄດ້. ເຈົ້າບໍ່ພິກຂ້າງວາງແອວເຮົາເລີຍ. ແລະກໍແມ່ນຂະນະນັ້ນເອງ ຄວາມຄຶດຢາກຫນີໃຫ້ຫວິດໄປຈາກເຈົ້າໄດ້ເກີດຂຶ້ນກັບຕົວຂອງເຮົາ. ຖ້າເຮົາຕີເຮັດຕາຍດິກນ້ຳແລ້ວ, ເຮືອກູ້ກະທັນຫັນກໍຈະດຶງເອົາເຮົາຂຶ້ນມາ.

- ທ່ານສາດສະດາຈານ, ທ່ານບໍ່ໄດ້ຕາຍດິກນ້ຳອີ່ຫລືຫວະຊັ້ນ? ຂ້າພະເຈົ້າງາມແລະຫວນຄຶດເຫັນສະພາບທີ່ຂ້າພະເຈົ້າແນມເຫັນແຕ່ເທິງຮ້ານໂດດລົງໄປນັ້ນ.

- ແມ່ນແລ້ວ, ຂ້ອຍບໍ່ໄດ້ຄຶດວ່າຊິຕາຍດິກນ້ຳ. ແຕ່ ເຊມຸຍແອນເອີຍ, ເຈົ້າຫຍຸມເອົາຜົມຂ້ອຍແຫນ້ນໂພດຈົນຂ້ອຍເກືອບຈະຮ້ອງຂຶ້ນເພາະມັນເຈັບແລະກໍໄດ້ກິນນ້ຳໄປ. ເຊມຸຍແອນ, ຂໍຂອບໃຈນຳເຈົ້າຫລາຍໆ. ເຈົ້າໄດ້ຊິດຊ່ວຍຂ້ອຍຢ່າງສຸດອົກສຸດໃຈ. ຢູ່ໃນເຮືອເຫລັ້ມນັ້ນບໍ່ມີໃຜສົງໄສຈັກດີ້ເລີຍວ່າຂ້ອຍຕາຍດິກນ້ຳອີ່ຫລີ. ແຕ່ເປັນຫຍັງເຈົ້າຈຶ່ງບິນຂຶ້ນເມືອຫ້ານໄດ້ລະ?

ຂ້າພະເຈົ້າຈຳຕ້ອງເລົ່າໃຫ້ມິນໂຮຍເຊີ ຟັງກ່ຽວກັບການລົ້ງເຄີຍກັນຄັ້ງທຳອິດກັບ ວານດິກ: ມັນໄດ້ຫລີ້ນຂີ້ໂກງກັບຂ້າພະເຈົ້າຢູ່ເທິງທ່າອາບນ້ຳແນວໃດ ດ້ວຍການເສກສົນປັ້ນແຕ່ງກ່ຽວກັບອີຕາ ແບລັກສະເນັກ ແລະບັງຄັບໃຫ້ຂ້າພະເຈົ້າຂຶ້ນໄປເທິງຮ້ານໂດດນັ້ນຄືແນວໃດ. ວານດິກ ຫຍຸມຄິ້ວເຂົ້າແລະງຽບຢູ່. ສ່ວນ "ສາດສະດາຈານງູ" ຊ້ຳຫົວລັ່ນຂຶ້ນ.

- ບາງທີ, ດຽວນີ້ ວານດິກ ອາດຈະຢາກຮູ້ວ່າຂ້ອຍໄດ້ພົບກັບຄົນຜູ້ໄດ້ຊິດຊ່ວຍເອົາຕົນຢູ່ທີ່ພະມ້າຄືແນວໃດແມ່ນຕີ? ເມື່ອຂ້ອຍໄດ້ເປີດອົກເປີດໃຈແລ້ວກໍຕ້ອງເປີດອົກເປີດໃຈໃຫ້ຫມົດ. ຂ້ອຍຈຳຕ້ອງໄປນາບູຄາດ ເພື່ອຊື້ຫນູແດງຈຳນວນຫນຶ່ງມາໃຊ້ເຂົ້າໃນການທົດລອງ. ຢູ່ແຫ່ງນັ້ນ ເຂົາເຈົ້າເຄີຍຈັບມັນດ້ວຍວິທີໃສ່ແຮ້ວ. ແຕ່ ວານດິກ ໄດ້ຕິດສ້ອຍຫ້ອຍຕາມຂ້ອຍໄປ. ຂະນະນັ້ນຢູ່ຫັ້ນພວມມີພະຍາດລະບາດກາລະໂລກ. ວານດິກ, ຖ້າແມ່ນໃນຂະນະທີ່ເຈົ້າສະກິດຮອຍເຮົາໄປນັ້ນຫາກເຈົ້າຫມົ້ນເຂົ້າໄປໃນແຫ່ງດັ່ງກ່າວ, ເຂົ້າໄປ ນາບູຄາດນັ້ນແລ້ວ, ກໍແນ່ນອນວ່າເຈົ້າຈະຕິດພະຍາດກາລະໂລກນັ້ນແລ້ວ. ເຮົາໄດ້ສີດເຊື້ອຕ້ານພະຍາດໃສ່ຕົນມາດົນແລ້ວ, ທັງສອງຊະນິດເພື່ອຕ້ານ ວາບາ ແລະ ມາຣີ. ເຈົ້າຮູ້ບໍ່, ວານດິກ, ຖ້າວ່າເຮົາພົບເຈົ້າໃນຫມູ່ບ້ານ ກາລະໂລກນັ້ນ, ເຮົາກໍບໍ່ຈຳເປັນຈະໄປສະກັດກັ້ນການກ້າວໄປສູ່ໂລກເບື້ອງນັ້ນຂອງເຈົ້າໄວ້ເລີຍ. ໃນຂະນະທີ່ໄປຢາມຕູບສອງສາມຫລັງຂອງຄົນເປັນພະຍາດ

ກາລະໂລກນັ້ນເຮົາແນມເຫັນຄົນຜູ້ຫນຶ່ງຢູ່ເທິງທາງແລະເຮົາກໍຄຶດໄດ້ໂລດວ່າ ຄົນຜູ້ນັ້ນຕ້ອງ ແມ່ນເຈົ້າ. ເຮົາຮູ້ສຶກມ່ວນໃຈໄວ້ກ່ອນແລ້ວທີ່ຈະໄດ້ສົນທະນາແບບສອງຕໍ່ສອງກັບເຈົ້າ, ແຕ່ ຄົນຜູ້ນັ້ນຊໍ້າແມ່ນ ເຊມຸຍແອນ, ຂີ້ຝຸ່ນເຕັມໂຕ, ພວມນັ່ງສັ່ນທົດໆຢູ່ແລະພວມສັ່ນສະຫຍອງ ຢູ່ຕໍ່ຫນ້າຄວາມຕາຍ. ຄົນຜູ້ນັ້ນໄດ້ຊົດຊ່ວຍເອົາເຮົາຢ່າງລືມຕົວຢູ່ທີ່ແບ້ນຮັກບໍ. ພວກເຮົາຈື່ ຫນ້າຈຳຕາກັນໄດ້. ຈະຕ້ອງຊ່ວຍກູ້ເອົາຊີວິດລາວໄວ້. ແຕ່ ເຊມຸຍແອນໄດ້ມີການສຳພັນສົນ ທົດກັບຄົນທີ່ເປັນພະຍາດມາແລ້ວ. ຈະຕ້ອງສິດຢາດ່ວນ. ແຕ່ເຮົາຊໍ້າກໍ່ເລືອດກັ່ນຕ້ານວາບາ ໄປນຳພຽງຢ່າງດຽວ. ເຊມຸຍແອນໄດ້ຮັບການສິດຢາ. ນັບວ່າເປັນໂຊກດີຂອງລາວ, ເພາະຢູ່ ນາປູຄາດຊໍ້າພວມລະບາດພະຍາດວາບາ, ບໍ່ແມ່ນ ມາຣີ. ພວກເຮົາຕ້ອງໄດ້ຜ່ານຜ່າລະບົບການ ແຍກຕົວກັນຢູ່ໄລຍະຫນຶ່ງ, ແລະທະຫານຊັ້ນສອງໂບໂຣ, ຄົນຜູ້ມີຄວາມຮອບຮູ້ນັ້ນ, ໄດ້ ຊ່ວຍເຮົາໃນການສົ່ງ ເຊມຸຍແອນເຊິ່ງຫມົດແຮງໄປຍ້ອນການເດີນທາງແລະຖືກກະຕຸ້ນແຮງ ນັ້ນໄປຍັງສະຖາບັນຄົ້ນຄ້ວາ, ນະທີ່ນັ້ນ, ເຮົາໄດ້ສິດທັງເລືອດກັ່ນຕ້ານມາຣີໃຫ້ລາວນຳ.

- ຂໍຂອບໃຈທ່ານອີກຄັ້ງຫນຶ່ງ, - ຂ້າພະເຈົ້າຫລຸດປາກອອກມາຢ່າງບໍ່ໄດ້ຕັ້ງໃຈ.

ແຕ່ ມົນໂຣຍເຊີ ເຮັດຫນ້າຫຍຸ້ງເຂົ້າ.

- ແຕ່ຈັ່ງໃດ, ຂ້ອຍກໍຍັງຖືວ່າເຈົ້າເປັນຄົນເນລະຄຸນຢູ່ ເຊມຸຍແອນ ເອີຍ. ເມື່ອໃນອຸທິ ຍານເລີ່ມມີການສູນເສຍງູເດີຍີເຣີ, ເຊິ່ງເວລາຕໍ່ມາ ວານດີກ, ດ້ວຍທ່າທາງຂອງຄົນອະນາຖາ ຜູ້ຫນຶ່ງ ມາພົບກັບນາງ ລີເຢີເພື່ອຂາຍງູໃຫ້ຂ້ອຍອີກ, ແລ້ວຂ້ອຍກໍຕົກລົງໃຈຈັບຕົວລາວ, ຂ້ອຍແລະນາງລີເຢີໄດ້ຕິດຕາໃສ່ຫາງງູ ເດີຍີເຣີ ທຸກໆໂຕ. ແລ້ວບັງເອີນ, ໃນສອງສາມມື້ຕໍ່ມາ ວານດີກ ຊໍ້າເອົາງູ ເດີຍີເຣີທີ່ຕິດຕາໃສ່ຫາງຮຽບຮ້ອຍນັ້ນມາໃຫ້ພວກເຮົາອີກ! ເຊມຸຍແອນ, ເຈົ້າມີການກະທຳທີ່ບໍ່ຖືກຕ້ອງ. ເມື່ອເຈົ້າຈັບຄົນຂີ້ລັກ, ບັກຂີ້ລັກຜູ້ນີ້ໄດ້ຢູ່ໃນອຸທິຍານແລ້ວບໍ່ ໄດ້ໃຫ້ສັນຍານຂຶ້ນ ...

- ຂ້າພະເຈົ້າສົງສານມັນ ... - ຊີ້ມືໃສ່ວານດີກ ແລ້ວຂ້າພະເຈົ້າເວົ້າຂຶ້ນພຸມໆ. - ເວລານັ້ນ ມັນຕ້ອງອຶດຫິວມາຕັ້ງສີ່ມື້ແລ້ວ ...

ມົນໂຣຍເຊີ ຫົວລັ່ນຂຶ້ນດ້ວຍຄວາມສຸດຈະລິດ.

- ຮາ, ຮາ, ຮາ! ອຶດຫິວຢູ່ສີ່ມື້ພຸ້ນນະ! ມັນແດກຢູ່ໃນຮ້ານອາຫານທີ່ດີທີ່ສຸດໃນ ຮັງ

ກູນຫັ້ນບຸ. ບາງທີມັນອາດຈະເຊື່ອງຫລາຍຫ້ອງໄວ້ໃນບ່ອນຕ່າງກັນ - ທັງຢູ່ໃນເມືອງແລະໃນໝູ່ບ້ານອ້ອມແອ້ມນັ້ນ. ເວລານັ້ນມັນມີເງິນກວ່າເຈົ້າຕັ້ງຫລາຍເທົ່າ, ຈັ່ງແມ່ນເຈົ້າໄຮ້ດຽງສາ! ພວກເຮົາຄົ້ນພົບຮອດແຫລ່ງຂູດຫນູນເງິນຄຳໃຫ້ມັນດຳລົງຊີວິດຢູ່ຢ່າງສະບາຍອີກ. ດຽວນີ້ເຈົ້າຕ້ອງຮູ້ວ່າ ເວລານັ້ນເຈົ້າໄດ້ລະເມີດ ກົດຢູ່ໃນອຸທິຍານ. ໂຈນເປັນໂຈນ. ສົມຄວນແທ້ພວກເຮົາຈະຕ້ອງຂູດເກົາເຜົາລ້າງມັນແຕ່ຄາວນັ້ນພຸ້ນ, ແຕ່ບໍ່ແມ່ນດຽວນີ້...

- ແມ່ນ, ທ່ານເວົ້າຖືກຫລາຍ! - ຂ້າພະເຈົ້າຫລຸດປາກອອກມາ, ຮູ້ສຶກວ່າຕົນເປັນຄົນບໍ່ຮອບຄອບແລະຫນ້າອັບອາຍຍິ່ງ. ຂ້າພະເຈົ້າແນມເບິ່ງວານດິກດ້ວຍຄວາມໂກດແຄ້ນ.

- ແນ່ນອນວ່າຂ້ອຍເວົ້າຖືກ, - ມິນໂຮຍເຊີເວົ້າ. - ເອີ... ຊີຈັ່ງໃດອີກ... ເຊມຸຍແອນ, ພໍແຕ່ແນມເຫັນຄວາມເປັນນົກສອງຫົວຂອງເຈົ້າແລ້ວ ຂ້ອຍກໍຮັບຮູ້ໂລດວ່າບໍ່ພຽງແຕ່ຈະຕ້ອງພົກຕົວໄປຈາກ ວານດິກເທົ່ານັ້ນ, ແຕ່ຍັງຕ້ອງຫລີກອອກຈາກເຈົ້າອີກ. ແມ່ນ, ມັນແມ່ນຈັ່ງຊັ້ນແທ້. ບໍ່ຄວນຈະລ້ຽງດູຜູ້ທໍລະຍົດໄວ້ໃນກ້ອງຂີ້ແຮ້ຂອງຕົນ. ບາງທີສິ່ງທີ່ງ່າຍດາຍກວ່າເພິ່ນແມ່ນໄສ່ສິ່ງເຈົ້າອອກໄປ. ແຕ່ເຈົ້າຊໍ້າລົງເຄີຍກັບ ວານດິກແລ້ວ. ມັນຊໍ້າເຮັດຕີເກົ່າທີ່ສຸດ. ມັນກໍມີແຕ່ຈະຫັນປ່ຽນເຈົ້າໃຫ້ມາເປັນລູກມືຂອງມັນ. ແຕ່ມັນໄດ້ແຕ່ສົນໃຈກັບຜົນປະໂຫຍດທີ່ຄັບແຄບຈຳນວນຫນຶ່ງ. ສ່ວນເຈົ້າ, ເຊມຸຍແອນເອີຍ, ເຈົ້າມີຄວາມສາມາດອັນກ້ວາງຂວາງກວ່າມັນ. ແລ້ວຂ້ອຍແລະນາງລີເຢີ ກໍວາງແຜນຢ່າງຫນຶ່ງຂຶ້ນມາ. ຂ້ອຍມີຫລອດແກ້ວອັນຫນຶ່ງທີ່ບັນຈຸວິຣຸດຊະນິດ "ຕົ້ນຫນາມຂອງຊາວບູສະແມນ" ທີ່ເຈົ້າຮູ້ດີແລ້ວນັ້ນ ເຕັມປຶກຢູ່. ບັນດາການທົດລອງຢູ່ໃນຮ່າງກາຍຂອງສັດໄດ້ຊ່ວຍເຮັດໃຫ້ຂ້ອຍມີພື້ນຖານໃນການສີດວິຣຸດຊະນິດນີ້ເຂົ້າໃນຮ່າງກາຍຂອງຄົນແລ້ວຈະມີຜົນສະທ້ອນເຖິງຮູບພາຍນອກ, ຈະທຳໃຫ້ຮູບຮ່າງນັ້ນມີການປ່ຽນແປງໄປ. ແລ້ວຂ້ອຍກໍໄດ້ຕັດສິນໃຈທົດສອບບັນຫານີ້ໃນຮ່າງກາຍຂອງຕົນ, ເຖິງແມ່ນນາງ ລີເຢີໄດ້ຂັດຂວາງບໍ່ໃຫ້ທຳການທົດລອງທີ່ສ່ຽງໄພກໍຕາມ. ຂ້ອຍໄດ້ສີດມັນເຂົ້າໃສ່ຕົນເອງ. ເລື່ອງຫລານພາງຂອງຂ້ອຍຄືສາດສະດາຈານ ໂຣນເຊີ ມາຢາມນັ້ນ ມັນເປັນພຽງແຕ່ ລະຄອນສາກຫນຶ່ງເທົ່ານັ້ນ. ຢາເຂັມນັ້ນໄດ້ປະຕິບັດຫນ້າທີ່ຂອງມັນ. ຫນ້າຕາຂອງຂ້ອຍມີການປ່ຽນໂສມ, ແຕ່ ວິຣຸດຍັງໄດ້ສົ່ງຜົນສະທ້ອນເຖິງລະບົບປະສາດສຽງຂອງຂ້ອຍອີກ. ສຽງປາກປ່ຽນໄປ, ແລະຍາມໃດຂ້ອຍກໍໄອຢູ່... ອະຮື່... ອະຮື່... ຂ້ອຍໄດ້ຕັດສິນໃຈ

ຫນີອອກໄປເພື່ອຫລົບຫລີກຈາກການຕິດຕາມຂອງ ວານດີກ, ເພື່ອຈະໄດ້ເຮັດວຽກທຳງານຢູ່ດ້ວຍຄວາມສະຫງົບແລະປົວພະຍາດໃຫ້ຫາຍໄປດ້ວຍການສີດເລືອດກັ່ນຕ້ານວິຣຸດ. ຂ້ອຍເລືອກເອົາຕົວເມືອງນ້ອຍ ແລະມິດງຽບແຫ່ງຫນຶ່ງທີ່ແມັກຊິກ ແລະກໍໄດ້ອຳລາຈາກອາວຂອງຂ້ອຍ, ຫມາຍຄວາມວ່າອຳລາຈາກຕົວຂອງຕົນເອງ, ໄປສູ່ແຫ່ງດັ່ງກ່າວຢ່າງສະຫວັດດີພາບ...

ວານດີກ ສັກຂະໂຍງອອກຈາກຕັ່ງແລະຍ່າງໄປຍ່າງມາຢູ່ໃນຫ້ອງ, ມັນກະຕຸ້ນໃຈຈົນເອົາມືຍ່ອງຫົວຢູ່.

- ຂ້າພະເຈົ້າບໍ່ອາດຈະອະໄພໃຫ້ຕົນໄດ້ໃນເລື່ອງນີ້! ເປັນຫຍັງຈຶ່ງບໍ່ຄຶດເຖິງເລື່ອງນີ້ຫະ!

- ວານດີກ, ເຈົ້າກ່ອມຕົວຫລາຍ, - ມິນໂຮຍເຊີທັງຫົວທັງຕອບ. - ເຈົ້າຄຶດເຖິງ, ແຕ່ມັນສວາຍໄປແລ້ວ, ແລະເຈົ້າກໍບໍ່ໄດ້ຄຶດຈົນເຖິງທີ່ສຸດ. ຂ້ອຍເວົ້າຕໍ່ວ່າຂ້ອຍອອກໄປ, ປະເຊມຸຍແອນ, ຊາຍຫນຸ່ມທີ່ສະຫລາດສົມຄວນຜູ້ຊຶ່ງເຮົາມີຄວາມພໍໃຈນຳນີ້ໄວ້ກັບສຳນັກ. ຊີວິດສ່ວງໄພພະເນຈອນເລີ່ມເຮັດໃຫ້ລາວມີຄວາມເສື່ອມເສຍ, ແລະຈະຕ້ອງຫັນປ່ຽນລາວໃຫ້ກັບມາສູ່ເສັ້ນທາງທີ່ເຫມາະສົມກັບຊາວຫນຸ່ມຜູ້ຫນຶ່ງ ທີ່ສຳເລັດການສຶກສາຊັ້ນເອກຈາກວິທະຍາໄລ ດີຍັງ. ຄັ້ງຫນຶ່ງ ຂ້ອຍໄດ້ສົ່ງເຈ້ຍຈົດຕຳລາເພື່ອໃຫ້ເຈົ້າຕຽມນຳກັ່ນຢູ່ໃນຫ້ອງທົດລອງ. ເປັນອັນວ່າ ເຊມຸຍແອນ ໄດ້ຊິນເຄີຍກັບລາຍມືຂອງນາງ ລີເຢີ, ເພາະຕຳລານັ້ນແມ່ນນາງ ລີເຢີເປັນຜູ້ບັນທຶກ. ແຕ່ ເຊມຸຍແອນຄຶດວ່ານັ້ນແມ່ນຕົວຫນັງສືຂອງຂ້ອຍ. ເລື່ອງນີ້ມັນສອດຄ່ອງກັບຄວາມມຸ່ງຫວັງຂອງຂ້ອຍ. ຂ້ອຍພະຍາຍາມນຳເອົາລາວເຂົ້າສູ່ເສັ້ນທາງວິທະຍາສາດ. ລາວໄດ້ສົນໃຈປຶ້ມກ່ຽວກັບວິຣຸດທີ່ຂ້ອຍສົ່ງໄປໃຫ້. ເປັນອັນວ່າຂ້ອຍໄດ້ບັນລຸຈຸດປະສົງຂອງຂ້ອຍ. ຂ້ອຍອອກຈາກພະມ້າໄປ, ແຕ່ ເຊມຸຍແອນຊໍ້າຄຶດວ່າ ຂ້ອຍຕ້ອງນອນຢູ່ຍ້ອນພະຍາດໄຂ້ຫມາກເຫລືອງ. ນາງລີເຢີຂຽນຫນັງສືໃສ່ເຈ້ຍສົ່ງໃຫ້ລາວໃນນາມະຂ້ອຍສົ່ງໄປໃຫ້, ແຕ່ຂ້ອຍຊໍ້າຂ້າມມະຫາສະຫມຸດປາຊີຟິກໄປແລ້ວດ້ວຍກຳປັ່ນເດີນທະເລເຫລັ້ມຫນຶ່ງ...

"ໂອ, ມັນເປັນຈັ່ງຊີ້ເດ, - ຂ້າພະເຈົ້າຄຶດແລະທວນຄືນເຖິງລາຍລະອຽດທຸກຢ່າງທີ່ເກີດຂຶ້ນໃນຂະນະທີ່ຂ້າພະເຈົ້າພວມດຳລົງຊີວິດຢູ່ໃນຄ້າຍຂອງ "ສາດສະດາຈານງູ". - ທຸກສິ່ງທຸກ

ຢ່າງໄດ້ຮັບການຈັດວາງໄວ້ລ່ວງໜ້າຢ່າງຄ່ອງແຄ້ວ. ຄິດແຕ່ວ່າສາດສະດາຈານເປັນປ່ວຍ, ຕໍ່ມາກໍເຊົາ... ເພິ່ນເລີ່ມເຮັດວຽກໃນຕອນກາງຄືນ... ເງົາທີ່ປະກົດອອກມາຢູ່ເທິງຜ້າກັ້ງ ເບິ່ງແລ້ວຊ່າງຄືກັບຕົວຈິງທີ່ສຸດເລີຍ".

ວານດິກ ໄດ້ແຕ່ຫັນໃຈຍາວຝູ່ງຢູ່.

- ໂອ້, ໂອ້, ຂ້າພະເຈົ້າຄຶດນຳ "ສາດສະດາຈານໆ" ແລະຫລານຂອງເພິ່ນຫລາຍທີ່ສຸດ...

ຂ້າພະເຈົ້າໄດ້ຕັດຄວາມໂອ້ໂອ່ຍຕ່າງໆເຊິ່ງຂ້າພະເຈົ້າເຫັນວ່າມີລັກສະນະປອມແປງຂອງມັນນັ້ນ.

- ຂ້ອຍກໍເບື່ອເຈົ້າທີ່ສຸດແລ້ວ ວານດິກ. ດຽວນີ້ ຈົ່ງຕອບຂ້ອຍເບິ່ງດູວ່າ, ເປັນຫຍັງເຈົ້າຈຶ່ງຕິດຕາມສາດສະດາຈານ?

ມິນໂຣຍເຊີ ເສີມຂຶ້ນ:

- ແລະໃຫ້ເວົ້າແຈ້ງເລີຍວ່າ ແມ່ນໃຜເປັນຜູ້ແຕ່ງຕັ້ງໃຫ້ເຈົ້າຕິດຕາມເຮົາ? ເຈົ້າລັງງລໍງຫວະ? ບໍ່ຕ້ອງຢ້ານ. ເລື່ອງມະຫລຶດປຶດປື່ ນັ້ນມັນຊິມີອີ່ສັງຫວະ! ເຮົາສັນຍາວ່າເຮົາຈະຕອບສະໜອງການເປີດອົກເປີດໃຈຂອງເຈົ້າດ້ວຍນ້ຳໃຈອັນກວ້າງຂວາງ... ອາ, ຖ້າເຮັດເສຍຄວາມລັບ ເຈົ້າຢ້ານວ່າຈະເສຍບ່ອນທຳມາຫາກິນຊັ້ນຫວະ? ຄັນຊັ້ນຫາລະມິດຢູ່, ແລະຖ້າເຮົາເວົ້າກົງຕາມຄວາມຈິງແລ້ວ ຈົ່ງງຶກຫົວທີ່ສະຫລາດຂອງເຈົ້ານັ້ນ ເພື່ອສະແດງວ່າເຫັນດີ. ເຊມຸຍແອນ, ຈົ່ງແນມເບິ່ງເພື່ອນຂອງເຈົ້າສາ. ວານດິກ, ເຈົ້າໄດ້ສົ່ງຄຳລາຍງານຕ່າງໆຂອງເຈົ້າກ່ຽວກັບ ມິນໂຣຍເຊີໄປຕາມສະຖານທີ່: "ແອລູໂອເຣີ, ຫ້ອງໄປສະນີ, ຕູ້ ປ. ນ. ລົງທະບຽນ, ຂ. ຊ". ແມ່ນເບາະ?

ວານດິກ ງຶກຫົວຄືຮູບປັ້ນຢູ່ໃນບົດລະຄອນພ້ອນຂອງໂມຍາ. ມິນໂຣຍເຊີ ໄອ, ຈັບເອົາກອກທີ່ຂ້າພະເຈົ້າສັ່ງໃຫ້ເຊິ່ງຍັງວາງຢູ່ເທິງໂຕະຂຶ້ນມາ ແລ້ວຍັດຢາ. ວານດິກຮູ້ສຶກຕົວແລະຟ້າວເດ່ເຫລັກໄຟທີ່ຂີດລຸກຢູ່ແລ້ວນັ້ນໄປຫາ.

- ເຊີນ, ທ່ານສາດສະດາຈານ...

ມິນໂຣຍເຊີ ຂອບໃຈ, ສູບຢາຢ່າງໂລ່ງອົກໂລ່ງໃຈແລະສືບຕໍ່ຕັ້ງຄຳຖາມຕ່າງໆອອກມາ:

- ແຕ່ເຈົ້າບໍ່ຮູ້ຈັກວ່າ ໃຜເປັນຜູ້ຮັບຈົດໝາຍຕ່າງໆຂອງເຈົ້ານັ້ນຫວະ? ເຮົາຊິບອກໃຫ້ເຈົ້າຮູ້ຈະແຈ້ງສາ. ທ່ານຊຸນສານ ເຊີຍເຕີນຢູ່ ແອຊູໂອເອີ ເປັນຜູ້ຮັບຈົດໝາຍຕ່າງໆຂອງເຈົ້າ. ຖ້າບໍ່ມີເຮົາແລ້ວເຈົ້າກໍບໍ່ມີວັນຈະຮູ້ເລີຍວ່າລາວຕ້ອງການຄຳລາຍງານເຫລົ່ານັ້ນ ເຮັດຫຍັງ. ສິ່ງທີ່ໜ້າຈັບໃຈມັນຢູ່ບ່ອນວ່າ ເຊີຍເຕີນເອງກໍບໍ່ຮູ້ຈັກເນື້ອໃນຂອງຈົດໝາຍເຫລົ່ານັ້ນຊ້ຳ. ແຕ່ເຊີຍເຕີນເປັນຜູ້ບໍລິຫານວຽກງານຂອງທ່ານເຈົ້າຂອງພາສາດ ໂອນມາອຸນ ແລະລາວກໍໄດ້ສົ່ງຈົດໝາຍຕ່າງໆທີ່ຍັງປອດໃສບໍລິບູນຂອງເຈົ້າເຫລົ່ານັ້ນ ໄປໃຫ້ທ່ານເຈົ້າຂອງພາສາດດັ່ງກ່າວ. ເຈົ້າບໍ່ຮູ້ຈັກສິ່ງເຫລົ່ານີ້ແດ່ ຫວະ, ວານດິກ? ເຈົ້າບໍ່ຈັກຫວະ? ເຈົ້າ, ນັກສືບຜູ້ລືຊື່ ໝາຍເລກ ສີ່ຮ້ອຍຊາວເອັດຂອງຫ້ອງການນັກສືບເອກະຊົນຢູ່ ໂບສະເຕີນແມ່ນຕີ? ບະມັນຕັ້ງແມ່ນຄວາມພາດພັ້ງທີ່ໃຫຍ່ຫລວງອັນໜຶ່ງ!

## III

ວານດິກ ໂດດໄປທາງແຈຫ້ອງ ແລະລ້ວງມືຂວາເຂົ້າໄປໃນກົງສົ້ງ. ຂ້າພະເຈົ້າຄຶດຊິໂດດຕາມມັນໄປ, ແຕ່ທ່ານ ມິນໂຮຍເຊີ ຍິ້ມຫົວແລະຂັດຂວາງຂ້າພະເຈົ້າໄວ້ດ້ວຍຄວາມຫຸ່ນທ່ຽງ.

- ຄ່ອຍໆແນ່ຕີ, ພວກທ່ານ...ເຮົາບໍ່ໄດ້ຄຶດຈະທຳຮ້າຍເຈົ້າ, ເບີສີ່ຮ້ອຍຊາວເອັດເອີຍ. ບາງຄັ້ງເຈົ້າຍ່ອມລືມຕົວ, ດ້ວຍເຫດນັ້ນ ເຮົາຈຶ່ງສັງເກດເຫັນເຄື່ອງໝາຍລັບຂອງເຈົ້າ. ເຈົ້າໄດ້ລົງນາມໃນໂທລະເລກທີ່ສົ່ງຈາກ ຮັງກູນໄປ ໂບສະເຕີນ ດ້ວຍເຄື່ອງໝາຍລັບອັນນັ້ນ. ລີເຢີ ແນມເຫັນເຈົ້າ. ເຈົ້າໄດ້ປະຮ່ອງຮອຍຕົວເລກເຄື່ອງໝາຍລັບນັ້ນຢູ່ໃນເຈ້ຍຊຶມທີ່ຫ້ອງໂທລະຄົມນາຄົມ. ລີເຢີ ໄດ້ລາຍງານໃຫ້ເຮົາຮູ້ຈັກ. ນາງ ຮູ້ວຽກງານຂອງເຈົ້າທຸກຢ່າງ. ເຈົ້າຄືດັ່ງນີ້ຈຶ່ງແມ່ນອຸບາດອີຫລີ, ວານດິກ...ເມື່ອບໍ່ສາມາດຈະເອົາຫຍັງມາເວົ້າອີກເຈົ້າກໍຄ້ວາໃສ່ປືນພົກເຣວອນເວີ ຫາລະປະມັນໄວ້ໃນກົງຫັ້ນ. ນັ່ງລົງແລະສູບຢາສາ.

ວານດິກສູບຢາຢູ່ດ້ວຍຄວາມຄັ້ນຄຶດແລະແກວ່ງຫົວ.

- ໄດ້ພົວພັນກັບຄູ່ຕໍ່ສູ້ແບບນີ້ຄືດັ່ງແມ່ນສະບາຍໃຈ.

- ຄວາມສະຫລາດສ່ອງໃສແລະຈິນຕະນາການອັນມີຊີວິດຊີວາຍ່ອມຈະຊ່ວຍເຮົາໄດ້ໃນສະພາບຄັບຂັນ, ຖ້າຫາກຮູ້ຈັກສວຍໃຊ້ຄຸນທາດຕ່າງໆເຫລົ່ານັ້ນ. ວານດິກ, ເລື່ອງນີ້ເຈົ້າຮູ້ຈັກ

ດີແລ້ວ, - ທ່ານມິນໂຮຍເຊີ ເວົ້າ. - ເຮົາຍັງສາມາດວາດພາບເຫັນຢ່າງແຈ່ມແຈ້ງວ່າ ຄັ້ງຫນຶ່ງ ຫົວຫນ້າຫ້ອງການສືບລັບເອີ້ນຫນຶ່ງໃນບັນດາພະນັກງານທີ່ເກັ່ງສຸດຂອງຕົນໄປພົບແລະເວົ້າກັບ ຫມໍວ່າ: "ເບີສີ່ຮ້ອຍຊາວເອັດທີ່ຮັກແພງ. ມີວຽກຫນຶ່ງທີ່ມີລາຍໄດ້ດີທີ່ສຸດ. ຈົ່ງຊອກຄົ້ນ ຫາສາດສະດາຈານ ມິນໂຮຍເຊີ ແລະຕິດຕາມການເຄື່ອນໄຫວຕ່າງໆຂອງເຂົາ. ບໍ່ຕ້ອງຫວາດ ຫວັ່ນໃນການໃຊ້ຈ່າຍຕ່າງໆ." ແມ່ນຈັ່ງຊັ້ນບໍ່?

- ເວົ້າລວມກໍຄືຊິແມ່ນແນວນັ້ນແຫລະ, - ວານດິກຈຳໃຈຕ້ອງເຫັນດີ.

- ວານດິກ, ປະກົດວ່າເຮົາໄດ້ເວົ້າຫມົດທຸກຢ່າງແລ້ວ ແມ່ນບໍ່? - ທ່ານ ມິນໂຮຍເຊີ ຫົວຢ່າງສະບາຍອາລົມ. - ເຈົ້າໄປໄດ້ແລ້ວ...

ວານດິກ ເບນເບິ່ງສາດສະດາຈານ, ກໍແມ່ນໃນຂະນະນີ້ເອງ ແລະກໍເປັນຄັ້ງທຳອິດທີ່ຂ້າ ພະເຈົ້າເບນເຫັນດວງຕາທັງຄູ່ຂອງມັນບໍ່ມີອຸບາຍລາຍລ່ຽມຫຍັງປະກົດອອກມາ. ມັນເບນ ອອກມາດ້ວຍການເບນເບິ່ງຢ່າງຄ່ຽມຄົມແລະບໍລິສຸດຂອງມະນຸດ.

- ຊິໃຫ້ຂ້າພະເຈົ້າໄປໃສໃນເວລານີ້? ທ່ານຄິດວ່າ ຂ້າພະເຈົ້າຈະໄປຫາທ່ານ ເຊີຍເຕີນ ແລະເວົ້າກັບເພິ່ນວ່າ: "ຮຽນທ່ານ, ທ່ານຈົ່ງໄປທີ່ຄະລີຫາດຕັ້ງຢູ່ໃກ້ງຜາດອກກຸຫລາບຄູ່ຫັ້ນ, ແລ້ວທ່ານຈົ່ງທຳຄວາມຮູ້ຈັກກັບບຸລຸດຜູ້ເລີດລ້ຳ, ຄົນຜູ້ທີ່ໄດ້ສອນໃຫ້ຂ້າພະເຈົ້າຮູ້ຈັກເຄົາລົບ ນັບຖືເຂົາ" ຊັ້ນຫວະ. ບໍ່, ຂ້າພະເຈົ້າຈະໄປຫາຫົວຫນ້າຂອງຂ້າພະເຈົ້າຍັງຊິດີກວ່າ ແລະເວົ້າ ນຳເພິ່ນວ່າ: "ທ່ານເຈົ້ານາຍ, ທ່ານຮູ້ຈັກບໍ່, ຂ້າພະເຈົ້າເບື່ອຫນ່າຍຕໍ່ການທ່ຽວຫລິ້ນຢ່າງບໍ່ມີ ເປົ້າຫມາຍແລະໄຮ້ຄວາມຫມາຍເພື່ອພົກຈອບລອບຫລອຍນີ້ຫລາຍທີ່ສຸດແລ້ວ..."

ມິນໂຮຍເຊີ ຕັດບົດມັນ:

- ຊົມເຊີຍ, ວານດິກ! ເບນເບິ່ງຕາເຈົ້າຂ້ອຍເຫັນວ່າເຈົ້າບໍ່ໄດ້ຫລອກລວງ. ເຊມຸຍແອນ ຊົມເຊີຍລາວເກາະແມ້. ນັ້ນແມ່ນໂຊກມະຫາສານທີ່ສຸດໃນຊີວິດຂອງຂ້ອຍ. ພວກເພື່ອນເອີຍ, ພວກເຮົາຈົ່ງດື່ມສະຫລອງໂຊກໄຊກັນເທາະ. ໃນຊີວິດພວກເຮົາຍ່ອມຍາກທີ່ຈະມີໂຊກດີ, ດັ່ງ ນັ້ນຈຶ່ງຄວນຈະຕ້ອງຮັກຫອມກະຫນອມແພງເອົາມັນ. ເຊມຸຍແອນ ຈົ່ງເອົາແກ້ວອັນໃດອັນ ຫນຶ່ງອອກມາຈາກຕູ້. ຂ້ອຍຄໍແຫ້ງ. ແມ້ແຕ່ຢາສູບກໍຍັງຊ່ວຍຫຍັງບໍ່ໄດ້ເລີຍ.

ໃນຕູ້ມີເຫລົ້າແວງຢູ່ສອງແກ້ວ. ຂ້າພະເຈົ້າແລ່ນແຕ່ຊັ້ນເທິງລົງມາຍັງຫ້ອງອາຫານໄວ

ປານລູກທະນູແລະອີກຄາວດຽວເທົ່ານັ້ນ ກໍໄດ້ເອົາເຫລັກໄຂຈຸກແກ້ວແລະຈອກໃຫຍ່ສາມໜ່ວຍມາວາງໃສ່ເທິງກາດຍໍ້ຂຶ້ນເມືອ.

- ເອົາລະ ເຊມຸຍແອນ, - ສາດສະດາຈານ ຫລິ່ວຕາໃສ່ຂ້າພະເຈົ້າ, - ຈົ່ງຄຶດເຖິງໜ້າທີ່ຂອງເຈົ້າ.

ຂ້າພະເຈົ້າໄຂຈຸກແກ້ວແລະລິນເຫລົ້າລົງເຕັມສາມຈອກໃຫຍ່.

ທ່ານ ມິນໂຣຍເຊີ ເດ່ມືອອກເຊື້ອເຊີນ.

- ຂໍເຊີນ, - ເພິ່ນຍິກຈອກ. - ພວກເຮົາຈົ່ງດື່ມຂວັ້ນຈອກນຳກັນເພື່ອອວຍພອນໃຫ້ແກ່ໂຊກໄຊ.

- ເພື່ອອວຍພອນສຸຂະພາບຂອງທ່ານ, ທ່ານສາດສະດາຈານ, - ວານດິກຕອບຢ່າງສຸພາບ. - ອວຍພອນໄຊຊະນະຂອງທ່ານ!

ທ່ານ ມິນໂຣຍເຊີ ດື່ມຂວັ້ນຈອກແລ້ວຟ້າວເຫຍັ້ນຈອກທີ່ສອງເຕັມໆໃຫ້ແຕ່ລະຄົນດື່ມ.

- ດຽວນີ້ ຂ້ອຍຢາກຈະດື່ມຂວັ້ນຈອກເພື່ອສຸຂະພາບຂອງເຈົ້າ, ວານດິກ. ພວກເຮົາຈົ່ງດື່ມ ເຊມຸຍແອນທີ່ຮັກແພງເອີຍ, ເພາະວ່າວານດິກ ຄຶດນຳແຕ່ ມິນໂຣຍເຊີ, ແຕ່ຄວາມຈິງຊ້ຳແມ່ນຕາມຮອຍຂອງລໍເດີ ປາກລິນເຕີນ ໄປ.

ຂ້າພະເຈົ້າຮູ້ສຶກຄືວ່າ ແປ້ນປູພື້ນທີ່ຢູ່ລຸ່ມຕີນຂອງຂ້າພະເຈົ້ານັ້ນພວມພັງທະລາຍລົງ. ວານດິກກໍເກືອບຈະເຮັດຈອກແຕກໄປ.

- ຢືນໃຫ້ມັນມີສະຫງ່າລາສີແດ່ແດ່ແມ້ ເພື່ອນເອີຍ. - ສາດສະດາຈານເວົ້າຄ່ອຍໆ, - ຄວາມຈິງ ຊຸນສານເຊີຍເຕີນເອງ ກໍເປັນພຽງແຕ່ຂີ້ວເສື່ອມຍົງລະຫວ່າງວານດິກ ແລະທ່ານເຈົ້າຂອງຜາສາດໂອນມາອຸນໃນປະຈຸບັນນີ້, ຄື ແມັກແລ້ງ, ໝາຍວ່າ ທ່ານ ປາກລິນເຕີນ ໃນປະຈຸບັນນີ້ເທົ່ານັ້ນ. ຈົນກະທັ້ງມາເຖິງວັນາທີນີ້ ມັນກໍຍັງເອົາໃຈໃສ່ຕິດຕາມ ທ່ານລໍເດີ ປາກລິນເຕີນຄົນເກົ່າ, ຄົນຜູ້ທີ່ມັນຕູ່ຫາວ່າຮ້າຍໃສ່, ກືກມັນຍຶດເອົາຜາສາດໂອນມາອຸນ ແລະທຸກສິ່ງທຸກຢ່າງໄປນັ້ນ, ວ່າພວມເຮັດຫຍັງຢູ່.

- ບັກພິເຜດມຶງເອີຍ! - ວານດິກພຶມພຳ. - ຂ້າພະເຈົ້າເອງກໍໄດ້ງິນເລື່ອງນີ້ມາແລ້ວ...

ທ່ານລໍເດີ ເດ່ຈອກຂອງຕົນມາຫາຂ້າພະເຈົ້າ.

- ແຕ່ປາກລິນເຕີນ ຄົນເກົ່າຍັງຄົງມີຊີວິດຢູ່ ແລະປະຈຸບັນນີ້ພວມດຸບຈອກກັບເຊມຸຍແອນບິນ, ຜູ້ເຊິ່ງກ່ອນນີ້ເພິ່ນໄດ້ຈັດແຈງໃຫ້ໄປຮຽນຢູ່ວິທະຍາໄລ ດີຍັງ.

- ທ່ານ... ພະນະທ່ານ... ອາດຍາທ່ານ... ທ່ານລໍເດີ ປາກລິນເຕີນ... - ຂ້າພະເຈົ້າພຶມພຳທັງສັ່ນເຊັນດ້ວຍຄວາມກະຕຸ້ນໃຈແລະເດ່ຈອກອອກໄປຢ່າງຂາດສະຕິ.

ຈອກສອງຫນ່ວຍດຸບກັນແລະສຽງດັງຂອງແກ້ວໄດ້ຊ່ວຍໃຫ້ຂ້າພະເຈົ້າຟື້ນສະຕິມາສູ່ສະພາບຄວາມເປັນຈິງໃນປະຈຸບັນ.

## IV

ທ່ານ ລໍເດີ ປາກລິນເຕີນ ດື່ມເຫລົ້າຈອກນັ້ນຫມົດແລ້ວລໍຖ້າໃຫ້ຂ້າພະເຈົ້າກັບ ວານດີກດື່ມຫມົດເຊັ່ນກັນ. ເພິ່ນນັ່ງຢູ່ເທິງຕັ່ງນອນ ແລະໄຕ້ກອກຢາທີ່ມອດໄປແລ້ວນັ້ນອີກ.

- ແມ່ນແລ້ວ, ພວກເພື່ອນ, - ເພິ່ນຍ້ຳຄືນອີກ. - ເມື່ອຂ້ອຍສູນເສຍທຸກສິ່ງທຸກຢ່າງໄປແລ້ວ, ກໍຍັງແຕ່ສະຫມຽນເກົ້າຂອງຕົນຄື ບິນແລະຄົນໃຊ້ຢູ່ໃນຜາສາດຄື ມິກລີເຕີນ ເຊິ່ງຄາວຍັງນ້ອຍ ຂ້ອຍເຄີຍເອີ້ນຢ່າງງ່າຍດາຍວ່າ ມິກລີເທົ່ານັ້ນທີ່ຍັງມີໄມຕີອາລີອາລອບຕໍ່ຂ້ອຍ. ເຂົາເຈົ້າອາດຈະກືເອົາສິ່ງນັ້ນເພື່ອຕອບສະຫນອງບຸນຄຸນຂອງຂ້ອຍທີ່ໄດ້ຈັດແຈງໃຫ້ລູກເຕົ້າຂອງເຂົາເຈົ້າໄດ້ຮ່ຳຮຽນສຶກສາ, ຫມາຍຄວາມວ່າແມ່ນເຈົ້າ, ເຊມຸຍແອນເອີຍ ແລະນາງລີເຢີ ມິກລີເຕີນ. ນາງນັ້ນກໍໄດ້ໄປຮຽນໂດຍອາໃສເງິນຂອງຂ້ອຍ. ວານດີກ ເຈົ້າຈົ່ງຄຶດຄືນເບິ່ງວ່າຢູ່ທີ່ພະມ້ານາງນັ້ນກໍຍັງໃສ່ນາມສະກຸນ ມິນເຕີນຢູ່. ເຈົ້າໄດ້ລາຍງານເລື່ອງນີ້ໃນຈົດຫມາຍສະບັບຕ່າງໆຂອງເຈົ້າ. ແຕ່ປະກົດວ່າ ແມັກແລ້ງບໍ່ໄດ້ສົນໃຈເກີ່ງລາຍລະອຽດຕ່າງໆເຫລົ່ານັ້ນເລີຍ. ປະຈຸບັນນີ້ ຂ້ອຍເຫັນວ່າມີແຕ່ການທີ່ຂ້ອຍໄດ້ຊຸດຊ່ວຍເຊມຸຍແອນ ແລະ ລີເຢີ ເທົ່ານັ້ນ ທີ່ເປັນສິ່ງສີລີມົງຄຸນທີ່ຂ້ອຍໄດ້ກະທຳມາໃນຊີວິດຂອງຕົນ ກ່ອນທີ່ຈະພົບກັບເຄາະຮ້າຍ. ຂ້ອຍໄດ້ສຸມໃຈທັງຫມົດໃສ່ການທັດສະນາຈອນແລະວິທະຍາສາດຫລາຍໂພດ. ເມື່ອແມັກແລ້ງ, ຄົນຜູ້ບໍ່ສົມກຽດນັ້ນ ໄດ້ກາຍເປັນເຈົ້າຂອງຖານະຕຳແຫນ່ງແລະຜາສາດຂອງຂ້ອຍແລ້ວ ຂ້ອຍກໍໄດ້ສາບານເອົາໄວ້ວ່າ ເດັດຂາດຈະຕ້ອງກອບກູ້ເອົາທຸກສິ່ງທຸກຢ່າງ - ກຽດສັກສີ, ຊັບສົມບັດ, ຖານະຕຳແຫນ່ງຄືນມາໃຫ້ໄດ້, ແຕ່ຂ້ອຍຈະບໍ່ໃສ່ຊື່ວ່າ ປາກລິນເຕີນ ອີກ, ແຕ່ຈະໃຊ້ຊື່ວ່າ ລໍເດີ ແອຊ

ໂອເຣີ. ເປົ້າຫມາຍຂອງຂ້ອຍຈະແມ່ນການເລງໃສ່ຜົນປະໂຫຍດຂອງຕົວເມືອງນີ້. ຂ້ອຍຈະສ້າງ ນິວມາອູນ, ເປັນຜາສາດໃຫມ່ຫລັງຫນຶ່ງ, ຄືກັບຜາສາດເກົ່າຂອງບັນພະບູລຸດຫລັງນັ້ນອ້ອຍຕ້ອຍ, ເຊິ່ງຢູ່ທີ່ນັ້ນຂ້ອຍເຄີຍໄດ້ປະສົບກັບຄວາມຜາສຸກສ່ວນຕົວແຕ່ພຽງໄລຍະສັ້ນໆ, ແຕ່ຂ້ອຍກໍຈະບໍ່ລືມຈົນຮອດວິນາທີສຸດທ້າຍ, ຢູ່ໃກ້ໆກັບພາງນປະຫງັດ, ເທິງຜາດອກກຸຫລາບຄູ່, ຂ້ອຍມີພື້ນຖານທີ່ຈະບັນລຸເຖິງຄວາມສະຫງ່າລາສີແລະຖານະຕໍາແຫນ່ງນັ້ນ. ແຕ່ຂ້ອຍບໍ່ອາດຈະມີຊີວິດແລະທັນໃຈຢູ່ຢ່າງຂາດວິທະຍາສາດໄດ້. ອີກຢ່າງຫນຶ່ງ ຂ້ອຍກໍຢາກກອບກູ້ເອົາທຸກສິ່ງທຸກຢ່າງເຫລົ່ານັ້ນຄືນມາໂດຍອາໄສໃສ່ການເຄື່ອນໄຫວ ທາງວິທະຍາສາດຂອງຂ້ອຍ. ຂ້ອຍນີ້ເອງທີ່ໄດ້ທໍາການຄົ້ນຄ້ວາເນື້ອແທ້ຂອງ ວິຣຸດພິດສາຊາດເມື່ອຄັ້ງຊາວປີທີ່ຜ່ານມາ. ຂ້ອຍມັກຂະແຫນງວິທະຍາສາດລວມ. ຫມາກຜົນຂອງມັນບໍ່ພຽງແຕ່ນໍາຜົນສະທ້ອນມາສູ່ຂະແຫນງເອກະເທດຂອງວິທະຍາການແລະອຸດສາຫະກໍາເທົ່ານັ້ນ, ແຕ່ຍັງມີຜົນສະທ້ອນຕໍ່ການດໍາລົງຊີວິດຂອງມວນມະນຸດທັງຫມົດ, ຈະແກ້ໄຂໄດ້ບັນດາບັນຫາທີ່ໃຫຍ່ຫລວງທີ່ສຸດ. ຂະແຫນງວິທະຍາສາດລວມແມ່ນຄົ້ນຄ້ວາເຖິງບັນດາປະກົດການພື້ນຖານຂອງຊີວິດ. ມີແຕ່ມັນເທົ່ານັ້ນທີ່ຈະນໍາເອົາພວກເຮົາໄປສູ່ການຮັບຮູ້ທໍາມະຊາດໄດ້ຢ່າງເລິກເຊິ່ງທີ່ສຸດ. ຂ້ອຍບໍ່ຢາກມອບພາລະກິດຂອງຕົນໃຫ້ຜູ້ອື່ນແລະແນ່ໃຈວ່າ ຕົນຈະຕ້ອງເຮັດພາລະກິດຂອງຕົນດ້ວຍມືຂອງຕົນ. ຂ້ອຍບໍ່ໄດ້ຮັບອະນຸຍາດໃຫ້ດໍາເນີນການທົດລອງທີ່ສ່ຽງໄພ. ແມ້ກແລ້ງ ໄດ້ສວຍໃຊ້ສິ່ງນີ້ແຫລະ. ຄວາມຈິງແລ້ວ ຂ້ອຍທໍາການທົດລອງສ່ຽງໄພພຽງສອງຄັ້ງເທົ່ານັ້ນ, ໃສ່ໃນຕົວຂອງຂ້ອຍເອງທີ່ພະມ້າແລະໃສ່ເຈົ້າ, ເຊມຸຍແອນເອີຍ, ຢູ່ນີ້. ແລ້ວທັງສອງຄັ້ງນີ້ລ້ວນແຕ່ສໍາເລັດຜົນຢ່າງສົມບູນ. ຂ້ອຍທໍາການທົດລອງເຫລົ່ານັ້ນໄປກໍເພື່ອວິທະຍາສາດອັນຍິ່ງໃຫຍ່ແລະເພື່ອຜົນປະໂຫຍດຂອງມວນມະນຸດ. ບັນດາກິດຈະກໍາຂອງຂ້ອຍ, ເມື່ອໄດ້ຮັບການຕີລາຄາຢ່າງຖືກຕ້ອງ ຈະສ້າງກຽດສັກສີໃຫ້ແກ່ປະເທດຊາດຂອງພວກເຮົາ, ພວກເພື່ອນ...

-ທ່ານຜູ້ໃຫຍ່, ທ່ານໄດ້ທໍາການຄົ້ນຄິດປະດິດຢ່າງຫນຶ່ງຂຶ້ນມາແລ້ວບໍ່? -ວານດິກບໍ່ອາດທີ່ຈະອົດທານ.

-ແມ່ນແລ້ວ, ຂ້ອຍໄດ້ຄົ້ນພົບວ່າ ວິຣຸດ ແມ່ນບັນດາທາດ ໂປຣຕີນກາຝາກ. ບັນດານໍເລກູນຂອງມັນມີພຶດຕິການຄືກັນກັບບັນດາເຊື້ອຕິດແປດ, ແຕ່ບັນຫາຕົ້ນຕໍແມ່ນ...

- ຂ້າແດ່ທ່ານ! - ວານດິກຫລຸດປາກອອກມາ. - ພໍ່ຂອງຂ້າພະເຈົ້າເຄີຍເປັນຄົນທຳງານຢູ່ໃນສວນຫມາກໄມ້ທີ່ ຢາວາ. ຂ້າພະເຈົ້າໄດ້ງິນເພິ່ນເວົ້າກ່ຽວກັບການຕິດພະຍາດນີ້.

- ດີຫລາຍ. ຫມາຍຄວາມວ່າເຈົ້າບໍ່ໄດ້ຫາວຢູ່ລ້າໃນເວລາທີ່ຂ້ອຍພວມເວົ້າຢູ່ນີ້. ບັນດາ ວີຣຸດ, ຫລືຄືດັ່ງເຂົາເຈົ້າເອີ້ນກັນວ່າ ບັນດາວີຣຸດລອດຈາກການກັ່ນຕອງ. - ແມ່ນອັນດຽວກັນທັງນັ້ນ - ສາມາດຈະດັດແກ້ພວກມັນໄດ້. ບັນດານັກຈຸລະສາດຮູ້ຈັກປູກພະຍາດໃຫ້ມີຄຸນທາດອັນຈຳເປັນແກ່ການທົດລອງຕ່າງໆ, ເຊັ່ນດຽວກັນກັບກະສິກອນສາມາດປູກຕົ້ນໄມ້ຕ່າງໆຂຶ້ນມາໄດ້. ແລ້ວຂ້ອຍເອງອີກ, ພາຍຫລັງທີ່ໄດ້ຄົ້ນຄ້ວາການປະກອບສ້າງ ມໍເລກູນຂອງບັນດາທາດ ໂປຣຕີນກາຝາກແລ້ວກໍໄດ້ເລີ່ມຕົ້ນດັດແກ້ພວກມັນດ້ວຍວິທີການທາງເຄມີສາດ.

ດ້ວຍການດັດແກ້ທຽມນີ້, ໃນບາງກໍລະນີ ວີຣຸດ ກໍຄ່ອຍໆຫມົດລັກສະນະທີ່ເປັນອັນຕະລາຍຂອງມັນໄປ, ສ່ວນຢູ່ໃນກໍລະນີອື່ນໆພວກມັນຊ້ຳມີລັກສະນະຊີວະສາດພິເສດໃຫມ່ໆຂຶ້ນຕື່ມ. ຂ້ອຍໄດ້ທົດລອງເບິ່ງລັກສະນະພິເສດດັ່ງກ່າວຢູ່ໃນຮ່າງກາຍຂອງຄົນ. ວີຣຸດໄດ້ທຳການປ່ຽນແປງຮູບຮ່າງໃບຫນ້າຂອງຂ້ອຍ. ວານດິກ ໄດ້ມາຫາຂ້ອຍຄືກັບມາຫາສາດສະດາຈານ ໂຣນເຊີ, ລາວບໍ່ຮູ້ເລີຍວ່າຕໍ່ຫນ້າຂອງລາວແມ່ນ ມິນໂຮຍເຊີ, ຄົນຜູ້ທີ່ລາວຕ້ອງການຈະຕິດຕາມ. ເຈົ້າເອງອີກ, ເຊມຸຍແອນ ຈື່ບໍ່ໄດ້ວ່າ ໂດບີແມ່ນສາດສະດາຈານໆ ຂອງຄົນນັ້ນເອງ. ກໍແກ່ນວີຣຸດອັນນັ້ນເອງທີ່ໄດ້ທຳການປ່ຽນແປງຂຶ້ນໃນຮ່າງກາຍຂອງ ວານດິກ. ແລ້ວຈາກນັ້ນຈຶ່ງມີການພະຈົນໄພຕ່າງໆເກີດຂຶ້ນມາເປັນໂຫລງ, ເຊິ່ງບໍ່ພຽງແຕ່ຕໍ່ສະເພາະ ເຊມຸຍແອນເທົ່ານັ້ນ. ວີຣຸດບາງຈຳພວກທີ່ຂ້ອຍດັດສ້າງແລະປູກລ້ຽງມັນດ້ວຍວິທີການທຽມນັ້ນໄດ້ສະແດງຕົວອອກມາວ່າມີຄວາມສາມາດດັດສ້າງການປະກອບສ້າງທັງຫມົດຂອງບັນດາທາດໂປຣຕີນ ຢູ່ໃນຮ່າງກາຍ. ພະຍາດກະດັນຂອງມັນຝະລັ່ງ, ພະຍາດໃບກູດຂອງຕົ້ນຝ້າຍ, ເລື່ອງໃບໄມ້ເກີດເປັນຫນາມ, ຄວາມປ່ຽນແປງລັກສະນະພາຍນອກຂອງຕົ້ນອ້ອຍ - ທຸກສິ່ງເຫລົ່ານັ້ນເຈົ້າລ້ວນແຕ່ຮູ້ຈັກແລ້ວແມ່ນບໍ່, ເຊມຸຍແອນ?

ແລ້ວຜູ້ອຸບປະກາລະຂອງຂ້າພະເຈົ້າກໍເລົ່າເລື່ອງທີ່ເພິ່ນກຶກເບລະເຫດ, ຈຳເປັນຕ້ອງກັບຄືນໄປຫາຫ້ອງທົດລອງເກົ່າທີ່ພະມ້າ, ບ່ອນເຊິ່ງລູກສິດຜູ້ແສນດີຂອງເພິ່ນຄື ລີເຢີ, ລູກສາວຂອງລຸງ ມິກລີ ໄດ້ດຳລົງຊີວິດແລະທຳງານຢູ່ນັ້ນ. ຫ້ອງທົດລອງນີ້ຕ້ອງການໃຫ້ມີເງິນອຸດ

ຫນູນຕື່ມ ເພື່ອສືບຕໍ່ການທົດລອງຕ່າງໆທີ່ປະກະເທີນໄວ້ຢູ່ ໂອນນາອູນ ນັ້ນ. ນະປະເທດອະເມລິກາ, ບິນເສັ້ນທາງໄປສູ່ພະມ້າ, ໃນຂະນະທີ່ພໍານັກຢູ່ໃນໂຮງແຮມແຫ່ງຫນຶ່ງນັ້ນ, ທ່ານ ປາກລິນເຕີນມີຄວາມພາດພັ້ງໄປຢ່າງຫນຶ່ງ: ເພິ່ນໄດ້ລົງທະບຽນກັບຄົນຍາມປະຕູເຂົ້າໂຮງແຮມ ດ້ວຍຊື່ທໍາອິດທີ່ຄິດສະເດືອກຂຶ້ນມາໄດ້. ນັ້ນແມ່ນຊື່ຂອງປູ່ເປົ້າເອົ້າດາແຕ່ເກົ່າກ່ອນທີ່ເປັນສາຍຍາດຂອງທາງແມ່, ຊື່ວ່າວິນລຽມ ມິນໂຮຍເຊີ. ຕູ້ນີ້ມີຊີວິດຢູ່ໃນຍຸກມະຫາປະຕິວັດ ໑໗ ເດືອນກຸມພາ ປີ ໑໓໔໓ ແລະໄດ້ປ່ອນບັດໃຫ້ຄວາມເຫັນພ້ອມກັບການສະກາປະນາປະເທດສາທາລະນະລັດ. ແມັກແລ້ງ ເດົາຊື່ນັ້ນອອກ, ພໍແຕ່ອ່ານຄໍາປະກາດຂອງຫົວຫນ້າຫ້ອງການສືບລັບ ເຊິ່ງມີລາຍຊື່ຂອງຜູ້ທີ່ເດີນທາງໄປສູ່ໂລກໃຫມ່ ໃນໄລຍະແຕ່ວັນທີ່ ໖ ເດືອນພຶດສະພາ ເຖິງວັນທີ່ ໖ ເດືອນເມສຸນ ປີ ໑໙໓໓ ... ຕິດຂັດມາພ້ອມນັ້ນ ແລ້ວເຂົາເຈົ້າກໍຢືນຢັນໄດ້ເຖິງຄວາມເປັນຄົນໆດຽວກັນລະຫວ່າງ ມິນໂຮຍເຊີກັບ ປາກລິນເຕີນເກົ່າ. ທາງຫ້ອງການນັກສືບໄດ້ຮັບຄໍາລາຍງານທີ່ມີຜົນປະໂຫຍດຢ່າງຫນຶ່ງແລະຈາກນັ້ນກໍເລີ່ມຕົ້ນເປີດສາກໃຫ້ແກ່ວຽກງານຂອງ ວານດິກ. ບັນດາວັດຖຸຕົວຢ່າງຂອງທາດປຸຍາທີ່ສົ່ງໄປແຕ່ສໍານັກງູນັ້ນ, ສະແດງວ່າເປັນບັນດາວັດຖຸຕົວຢ່າງທີ່ດີທີ່ສຸດຢູ່ໃນຕະຫລາດໂລກ, ແຕ່ຄວາມລັບຂອງການພະລິດນີ້ມີພຽງທ່ານລໍເດີ ແລະລີເຢີເທົ່ານັ້ນທີ່ຮູ້ຈັກ. ໂດຍອາໃສບັນດາພິດງູ, ທ່ານລໍເດີສາມາດເກັບກໍາເງິນໄດ້ເຖິງສອງທີບກ້າທຽບໃສ່ຄ່າທັງຫມົດຂອງພາສາດໂອນນາອູນ. ພາຍຫລັງທີ່ສັງເກດເຫັນການຕິດຕາມຂອງວານດິກ, ທໍາອິດທ່ານ ປາກລິນເຕີນຄິດວ່ານັກສືບຄົນນີ້ຖືກສົ່ງມາຈາກບໍລິສັດທີ່ຊ່ວງຊີງທາງດ້ານການຄ້າກັບເພິ່ນ ດ້ວຍຈຸດປະສົງຄົ້ນຫາຄວາມລັບຂອງການພະລິດ. ແລະເພິ່ນບໍ່ອາດຈະປ່ອຍໃຫ້ເປັນດັ່ງນັ້ນໄດ້ ...

- ເຊມຸຍແອນເອີຍ, ແມ້ແຕ່ເຈົ້າເອງຂ້ອຍກໍຍັງໄດ້ທໍາການທົດສອບເບິ່ງ, ແຕ່ເຈົ້າສະແດງໃຫ້ເຫັນວ່າເຈົ້າເປັນພຽງຊາຍຫນຸ່ມຜູ້ດີມີມາລະຍາດ ແລະສະແຫວງຫາຄວາມຮູ້ເທົ່ານັ້ນ, ແລ້ວຂ້ອຍກໍຈຶ່ງພົວພັນກັບເຈົ້າ. ຂ້ອຍເອງຮູ້ວ່າເຈົ້າບໍ່ພຽງແຕ່ເປັນ ເຊມຸຍແອນ, ແຕ່ຍັງແມ່ນບິນ ອີກ ... ດ້ວຍເຫດນັ້ນຂ້ອຍຈຶ່ງຢາກສອນໃຫ້ເຈົ້າມີຄວາມລົ້ງເຄີຍກັບວຽກງານໃນສໍານັກງູ.

- ຂ້າພະເຈົ້າຈະຈື່ຈໍາສໍານັກນັ້ນໄວ້ເລື້ອຍໄປ, - ວານດິກເວົ້າ, - ແຕ່, ເວົ້າທົ່ວໄປແລ້ວ, ຂ້າພະເຈົ້າກໍຄິດວ່າ, ຕົນກໍຄວນຈະຕັ້ງສໍານັກລ້ຽງງູແຫ່ງຫນຶ່ງແບບດຽວກັນນັ້ນອີກບໍ່. ເວົ້າຕາມ

ຄວາມຈິງແລ້ວ, ບາງທີລັງງູ ເດີຍີເຣີ ແລະງູຊະນິດອື່ນໆຍັງດີກ່ວາລັງງາຫມູຫລືວ່າລໍເສຍອີກ. ບັນຫາຂອງມັນມີຢູ່ວ່າກ່ອນອື່ນຫມົດແມ່ນຕ້ອງມີຫົວນັກປາດ, ແຕ່ສິ່ງນັ້ນຂ້າຊ້ຳບໍ່ມີຫຍັງພ້ອມພຽງເລີຍ. ຂ້າພະເຈົ້າຂໍໂທດຫລາຍໆ, ຍາທ່ານ, ຂ້າພະເຈົ້າຢາກຈະຟັງເລື່ອງຂອງໂຕວິຣຸດທີ່ຫນ້າສາບແຊ່ງນັ້ນໃຫ້ເກືອກກົກເກືອປາຍ. ພວກມັນເຮັດໃຫ້ຂ້າພະເຈົ້າມີການປ່ຽນແປງໄປຈົນກະທັ້ງເຊມຸຍແອນ ກໍຈື່ບໍ່ໄດ້. ຖ້າຂ້າພະເຈົ້າຫາກປ່ອນຫົວເຂົ້າໄປໃນຫ້ອງການນັກສືບ, ທ່ານຜູ້ອຳນວຍການກໍຈະຖືວ່າ ຂ້າພະເຈົ້າເປັນຕົວປອມເທົ່ານັ້ນ.

-ວານດິກເອີຍ, ເຮົາຍັງສາມາດເຮັດໃຫ້ນໍເລກູນວິຣຸດມີການປ່ຽນແປງເກືອຂັ້ນວ່າ, -ທ່ານປາກລິນເຕີນ ເວົ້າ, -ພວກມັນຈະເຮັດໃຫ້ຮ່າງກາຍບໍ່ອາດຈະສຳພັດກັບແມ່ພະຍາດຕິດແປດຊະນິດທີ່ຮ້າຍແຮງທີ່ສຸດໄດ້ອີກດ້ວຍ. ພາຍຫລັງທີ່ໄດ້ສີດເຊື້ອຢູ່ ນາປູຄາດ ແລະຢູ່ນີ້ແລ້ວ, ເຊມຸຍແອນ ເອີຍ, ເຈົ້າຈະມີຄວາມສາມາດຫລີກລ່ຽງຈາກການຕິດພະຍາດທຸກໆຢ່າງໄດ້ຢ່າງຂາດຂັ້ນ. ເກືອແມ່ນຫມາຫວໍ້ ຫລືຫນູທີ່ມີເຊື້ອພະຍາດກາລະໂລກຈະກັດເຈົ້າ, ແຕ່ຈະບໍ່ມີວິຣຸດຕົວໃດໆ, ພະຍາດຕົວໃດໆທີ່ສາມາດບັບຕົວເຂົ້າໃນຮ່າງກາຍຂອງເຈົ້າໄດ້ອີກ...

-ແຕ່ຂ້າພະເຈົ້າຈະປ່ຽນໂສມໄປຕະຫລອດການ, -ຂ້າພະເຈົ້າພຶມພຳ.

-ບໍ່ດອກ, ເຊມຸຍແອນ, ຂ້ອຍສີດເຂົ້າໃສ່ຮ່າງກາຍຂອງເຈົ້ານັ້ນເປັນພຽງແຕ່ວິຣຸດປະເພດທີ່ໄດ້ບັບໃຫ້ມັນອ່ອນເພຍລົງແລ້ວ, ມັນມີປະສິດທິພາບຢູ່ໃນໄລຍະອັນຈຳກັດເທົ່ານັ້ນ. ພຽງແຕ່ວ່າເຈົ້າຫວາດວິຕົກໄປເກີນຄວນຊື່ໆດອກ. ຕາມຂ້ອຍເບິ່ງແລ້ວ, ມັນບໍ່ມີຮ່ອງຮອຍຂອງການປ່ຽນຮູບຮ່າງໃດໆຢູ່ໃນຕົວຂອງເຈົ້າອີກແລ້ວ. ເອົາແວ່ນຢູ່ໃນຕູ້ຫັ້ນມາແຍງເບິ່ງດູ.

ແວ່ນໃບນັ້ນພາໃຫ້ຂ້າພະເຈົ້າເຫັນວ່າບໍ່ມີສິ່ງໃດເກີດຂຶ້ນກັບຂ້າພະເຈົ້າ ເປັນພິລຶກຫຶກຫາເລີຍ, ຢູ່ໃນແວ່ນນັ້ນແມ່ນຊາຍຫນຸ່ມຄົນຫນຶ່ງມີຫນ້າຕາພອມເສືອ, ແຫ້ມແດດແລະເຂັ້ມແຂງພວມແນມອອກມາເບິ່ງຂ້າພະເຈົ້າ.

-ອາ ເຮົາເປັນຄົນຜູ້ເກົ່າແລ້ວ! -ຂ້າພະເຈົ້າຮ້ອງໂຮຂຶ້ນຢ່າງຄຶກຄະນອງ. -ທ່ານປົວຂ້າພະເຈົ້າໃຫ້ເຊົາດີແລ້ວ! ຂອບໃຈທ່ານຫລາຍໆ!

-ເອົາແວ່ນມາໃຫ້ເຮົາເບິ່ງດູ, -ວານດິກສະເຫນີ. ເຂົາແນມເບິ່ງແວ່ນແລ້ວກໍໄດ້ແຕ່ປ່າຍມືປະຕິເສດ. -ອີແມ່ກໍຈື່ເຮົາບໍ່ໄດ້ດອກ! ຖ້າຈະຈື່ໄດ້ກໍທໍ່ອາໄສແປ້ວຢູ່ງ່ອນນີ້ເທົ່ານັ້ນແຫລະ:

ກ່ອນນີ້ມີເທື່ອຫນຶ່ງຂ້າພະເຈົ້າຕີກັນກັບພວກເດັກນ້ອຍຢູ່ເທິງຫ້ອງກະຫນິບ, ເກືອບພວກເຂົາເຈົ້າຕີຫົວຂ້າພະເຈົ້າແຫລກອຸ້ຍປຸ້ຍໄປ.

- ຖ້າຕ້ອງການເຮົາຈະປົວເຈົ້າເອົາບໍ່ລະ? - ທ່ານ ປາກລິນເຕີນ ຖາມ ວານດິກ. ແຕ່ເຂົາວາງແວ່ນລົງຫນ້າໂຕະຢ່າງລະມັດລະວັງແລ້ວແກວ່ງຫົວປະຕິເສດ.

- ຂໍຂອບໃຈນຳທ່ານ, ເລື່ອງນີ້ບໍ່ຄວນຈະໃຫ້ທ່ານຕ້ອງເປັນຫ່ວງນຳດອກ. ໃນໂລກນີ້, ຂ້າພະເຈົ້າບໍ່ມີຄົນຮັກຄົນແພງໃດໆອີກແລ້ວ. ຂ້າພະເຈົ້າຈະມີຊີວິດສືບມື້ສືບວັນໄປໃນຮູບຮ່າງແບບໃດກໍໄດ້. ມັນບໍ່ໄດ້ຂີ້ເຮີະໄປກວ່າຜູ້ອື່ນພໍເທົ່າໃດດອກ.

ທ່ານ ປາກລິນເຕີນ ຍັງເວົ້າເຖິງຄວາມຄາດຄະເນທີ່ຫນ້າສົນໃຈບາງຢ່າງກ່ຽວກັບວິຣຸດຕື່ມອີກ. ບາງທີອາດແມ່ນບັນດາຊາກເສດຂອງຝູງແມ່ພະຍາດ, ໃນວິວັດການພັນແປນັບສິບໆລ້ານປີມານີ້ ພວກມັນໄດ້ຊິນເຄີຍກັບລັກສະນະກາຝາກແບບນີ້ມາແລ້ວແລະຫລັງຈາກໄລຍະເວລາດັ່ງກ່າວ ພວກມັນກືກສູນເສຍລັກສະນະພິເສດປະຈຳຕົວທົ່ວໆໄປຂອງຈຸລະຊີບ. ເຖິງຈັ່ງໃດກໍຕາມ ບັນດາວິຣຸດທີ່ທ່ານ ປາກລິນເຕີນໄດ້ຄົ້ນຄ້ວາມານັ້ນກໍໄດ້ກາຍມາເປັນສິ່ງ "ບອກນອນສອນງ່າຍ" ແລະເລີ່ມຕົ້ນປະຕິບັດຕາມວິທະຍາສາດແລະເຈດຕະນາຂອງມະນຸດແລ້ວ.

ໃນຂະນະທີ່ເລົ່າເລື່ອງຕົວເອງ ແລະເລື່ອງກ່ຽວກັບວິຣຸດສູ່ພວກເຮົາຟັງຢູ່ນັ້ນ, ທ່ານລໍເດີໄດ້ມີຄວາມກະຕືລືລົ້ນຂຶ້ນ. ອີກຄັ້ງຫນຶ່ງ "ສາດສະດາຈານໆ" ທີ່ແສນຮັກແພງໃນເມື່ອກ່ອນມານັ່ງຢູ່ຕໍ່ຫນ້າຂອງຂ້າພະເຈົ້ານີ້, ແລະກໍແມ່ນຜູ້ທີ່ຊິດຊ່ວຍໃຫ້ຂ້າພະເຈົ້າໄດ້ສຶກສາຮ່ຳຮຽນຢູ່ວິທະຍາໄລດີຍັງ, ຢູ່ພະມ້າແລະຢູ່ບ່ອນນີ້. ຂ້າພະເຈົ້າຟັງເພິ່ນເວົ້າດ້ວຍຄວາມຊື່ນຊົມ, ແລ້ວກໍຮູ້ສຶກວ່າແຕ່ລະຄວາມເວົ້າຂອງເພິ່ນໄດ້ພາໃຫ້ຂ້າພະເຈົ້າຮັ່ງມີທາງດ້ານຄວາມຮັບຮູ້ຂຶ້ນກ່ວາເກົ່າ.

## V

ທ່ານ ປາກລິນເຕີນເວົ້າວ່າ ຖ້າແຍກທາດໂປຣຕີນອອກມາຈາກເຫຍື່ອຈຸລັນຂອງຫມາໂຕຫນຶ່ງແລະໃຊ້ວິທີການທຽມເຮັດໃຫ້ມັນສາມາດມີຊີວິດຢູ່ຢ່າງກາຝາກ, ຫລັງຈາກນັ້ນ ກໍນຳເອົາມັນໄປສີດເຂົ້າໃນຮ່າງກາຍຂອງແມວໂຕຫນຶ່ງ ມັນກໍຈະເກີດມີປະຕິກິລິຍາຕໍ່ການປະກອບສ້າງທາດໂປຣຕີນຂອງແມວ; ບັນຫາດັ່ງກ່າວຈະເຮັດໃຫ້ແມວມີລັກສະນະພິເສດຕ່າງໆຂອງຫມາ.

-ແມ່ນ, ເຊມຸຍແອນເອີຍ, ໃນຫ້ອງລ້ຽງສັດທົດລອງຂອງຂ້ອຍ ເຈົ້າເອງໄດ້ເຫັນມາແລ້ວວ່າຫມາເກີດມີປະກົດການຕ່າງໆຄືແມວແລະກົງກັນຂ້າມແມວຊ້ຳມີປະກົດການຄືຫມາ.

ວານດິກ ຕົບຫນ້າຜາກປົວະບາດຫນຶ່ງ.

-ອາ ແມ່ນແລ້ວ, ແມ່ນຝູງສັດຂອງທ່ານຫາວະໄປປະກົດຕົວຂຶ້ນຢ່າງບັງເອີນຢູ່ ແອຊູໂອເອີຫວ່າງມື້ຊືນນັ້ນ? ຝູງແມວເຫົ່າຄືຫມາ ແລະຝູງຫມາຊ້ຳຮ້ອງຄືແມວ. ບະ, ເລື່ອງເປັນຕາຢາກຫົວຄືຫຍັງນິ!

-ຫນ້າເສຍດາຍທີ່ ເຊມຸຍແອນ ເຮັດຫລຸດອອກຈາກຄອກໄປ, -ທ່ານ ປາກລິນເຕິນ ຢືນຢັນ.

-ບະ, ເຂົາເຈົ້າຈະບໍ່ຂອບໃຈນຳທ່ານຍ້ອນເລື່ອງນີ້ດອກ, -ວານດິກແກວ່ງຫົວແລະອ່ວາຍມາທາງຂ້າພະເຈົ້າ. -ຝູງແມວ-ຫມາເຫລົ່ານັ້ນສົ່ງເຊື້ອໂລກໄປທົ່ວທຸກແຫ່ງ. ຂ້າແດ່ພະນະທ່ານ, ຂໍໃຫ້ພະນະທ່ານຮູ້ເອົາໄວ້ວ່າ ຊຸນສານ, ທ່ານຜູ້ພິພາກສາ, ແລະຄົນອື່ນໆອີກຈຳນວນຫລວງຫລາຍໄດ້ຕິດພະຍາດນັ້ນໄປຄືແນວໃດກໍ່ພໍແລ້ວ!

-ຮູ້, ຮູ້ລະຕິ, ທ່ານ ປາກລິນເຕິນ ຕອບ. -ເອີ...ບໍ່ຕ້ອງວິຕົກດອກ. ບັນດາວິຣຸດທຽມບໍ່ມີຄວາມຄົງທົນຄືເຈົ້າຄິດນັ້ນດອກ. ຊາຍຫນຸ່ມຂາຍຢາທີ່ເຄີຍສົ່ງຢາທົດລອງໃຫ້ເຮົາໄດ້ລາຍງານໃຫ້ເຮົາຊາບໃນທັນທີແລ້ວກ່ຽວກັບພະຍາດເລີກລັບແລະບັນດາຄວາມສັບສົນລະວົນອົນທະການທີ່ມັນກໍ່ຂຶ້ນໃຫ້ແກ່ທ່ານຫມໍພຣິດທີ່ເຄົາລົບນັ້ນ. ເຮົາໄດ້ອ່ານບົງສັ່ງຢາຂອງເພິ່ນ. ບົງສັ່ງຢາເຫລົ່ານັ້ນຖືກຕ້ອງທີ່ສຸດ. ເຊມຸຍແອນ, ຂ້ອຍເຫັນວ່າເຈົ້າພວມຫົວ. ບໍ່ຄວນຈະ ຫົວຂວັນສິ່ງທີ່ເຈົ້າບໍ່ທັນຮູ້ດີນັ້ນຈັກເທື່ອ. ທ່ານ ພຣິດ ອາຍຸແກ່ແລ້ວ, ດ້ວຍເຫດນັ້ນເພິ່ນຈຶ່ງເປັນທ່ານຫມໍທີ່ມີບົດຮຽນຫລາຍທີ່ສຸດຄົນຫນຶ່ງ. ເພິ່ນເຂົ້າໃຈໄດ້ວ່າບັນຫາມັນຢູ່ບ່ອນໃດ. ດ້ວຍວິທີການໂອ້ລົມສອບຖາມກັບບັນດາຄົນເຈັບນັ້ນເພິ່ນໄດ້ຄົ້ນພົບບໍ່ເກີດຂອງພະຍາດຕິດແປດ. ມື້ນັ້ນຂ້ອຍໄດ້ພົບກັບເພິ່ນ. ພວກເຮົາໄດ້ຫວນຄືນເຖິງເລື່ອງເກົ່າໆເລື່ອງຫນຶ່ງ. ປີ ໑໙໑໘, ຢູ່ທີ່ສະຫນາມຮົບມີພະຍາດແປກປະຫລາດຊະນິດຫນຶ່ງປະກົດຂຶ້ນເຊິ່ງທ່ານຫມໍທຸກໆຄົນ ລ້ວນແຕ່ຮັບຮອງວ່າແມ່ນພະຍາດໄຂ້ຊະນິດຫນຶ່ງທີ່ບໍ່ທັນຮູ້ຈັກບໍ່ເກີດຂອງມັນຈະແຈ້ງເທື່ອ, "ຍ້ອນວ່າເຂົາເຈົ້າບໍ່ທັນຮູ້ຈັກມັນດັ່ງນັ້ນການກະຕວງຈຶ່ງມີຄວາມສັບສົນ, ທ່ານຫມໍເກົ້າຄົນຫນຶ່ງໄດ້ຄົ້ນ

ພົບ, ເພິ່ນຜູ້ນັ້ນພຽງແຕ່ກວດພະຍາດໃຫ້ຄົນເຈັບສິບຄົນເທົ່ານັ້ນແລ້ວກໍເວົ້າວ່າ": ເພື່ອນຮ່ວມງານທີ່ຮັກແພງທັງຫລາຍ, ນີ້ມັນແມ່ນພະຍາດເປັນຫວັດທຳມະດາສາມັນນັ້ນເອງ". ແລ້ວເພິ່ນຜູ້ທີ່ຜ່ານ ປະສົບການຕົວຈິງນັ້ນກໍເປັນຜູ້ຖືກຕ້ອງ. ພະຍາດໄຂ້ທີ່ບໍ່ຮູ້ແຈ້ງເຖິງບໍ່ເກີດຂອງມັນນີ້ໄດ້ລະບາດເປັນພະຍຸຊະນິດຫນຶ່ງລາມໄປທົ່ວດວງດາວຂອງພວກເຮົານີ້ພາຍໃຕ້ຊື່ທີ່ວ່າ"ພະຍາດແອັສປາໂຍນ" ທີ່ບໍ່ແຕກຕ່າງຫຍັງກັບ ອິນຟລູເອັນໂກກຣີໂປ ຫມາຍຄວາມວ່າພະຍາດຫວັດນັ້ນເອງ, ເຊິ່ງແມ່ນພະຍາດຊະນິດຫນຶ່ງໂດຍແມ່ນວິຣຸດກໍ່ຂຶ້ນ, ແຕ່ມັນຢູ່ໃນອາການຫນັກເປັນພິເສດ. ແຕ່ຄົນເຈັບຂອງທ່ານຫມໍ ຟຣິດ ເຊື່ອແນ່ວ່າຈະຕ້ອງເຊົາປ່ວຍຫມົດທຸກຄົນ ແລະໃນຂະນະນີ້ກໍພວມຄ່ອຍໆເຊົາປ່ວຍຈາກພະຍາດນັ້ນຢູ່.

ຂ້າພະເຈົ້າຢາກຮູ້ແຈ້ງວ່ານະທີ່ນີ້, ໃນຫ້ອງທົດລອງນີ້, ທ່ານ ປາກລິນເຕິນ ໄດ້ທຳການທົດລອງຫຍັງແດ່ໃນຮ່າງກາຍຂອງຂ້າພະເຈົ້າ. ເພິ່ນເວົ້າ:

- ຂ້ອຍຕ້ອງກັບມາທີ່ ແອຊູໂອເຣີ ບ້ານເກີດດ້ວຍລັກສະນະທີ່ບໍ່ໃຫ້ໃຜຈື່ຕົນໄດ້. ຂ້ອຍໄດ້ທຳການທົດລອງຕ່າງໆສຳເລັດໄປເກືອບຫມົດແລ້ວ, ຍັງແຕ່ຈະດຳເນີນການທົດລອງສຸດທ້າຍຊ້ຳສາ ແລະຊອກຫາຊ່ອງທາງກອບກູ້ເອົາການະຕຳແຫນ່ງເດີມມາໃຫ້ຕົນ. ນີ ວານດິກ, ເຮົາຄິດວ່າເຮົາໄດ້ຫນີຫວິດໄປຈາກເຈົ້າຢ່າງຂາດນັ້ນຕັ້ງແຕ່ຕອນຢູ່ ມາຊາດລາມພຸ້ນແລ້ວ. ມິນໂຮຍເຊີ ຫາຍສາບສູນ, ໂຮນເຊີ ກໍຫາຍສາບສູນໄປເຊັ່ນກັນ, ແລ້ວນະທີ່ນີ້, ຢູ່ນອກກຳແພງເມືອງແອຊູໂອເຣີແຫ່ງນີ້ພັດມີທ່ານໂດບີໃດຫນຶ່ງມາຢູ່. ມິກລີຜູ້ບໍລິສຸດຂອງເຮົາດຳລົງຊີວິດຄ້າງຢູ່ເວສະລີ ດ້ວຍເງິນທີ່ເຮົາໄດ້ສົ່ງຜ່ານລູກສາວຂອງລຸງຄື ລີເຢີ, ລຸງໄດ້ສ້າງເຮືອນຫລັງນີ້ຂຶ້ນມາດ້ວຍການຊົດຊ່ວຍຂອງອາຍຢີດໍປິນ. ຫນ້າເສຍດາຍແຕ່ວ່າ ອາຍຢີດໍປິນທີ່ຫນ້າສົງສານນັ້ນໄດ້ມໍລະນາໄປແລ້ວ. ຂ້ອຍບໍ່ໄດ້ພົບລາວອີກເລີຍໃນຄາວທີ່ຍັງມີຊີວິດຢູ່. ນີ ເຊມຸຍແອນ, ມິກລີຈະເລົ່າໃຫ້ເຈົ້າຟັງເຖິງເວລານາທີສຸດທ້າຍຂອງພໍ່ເຈົ້າ. ລາວຕາຍໄປໃນຂະນະທີ່ປາກຍັງຈົ່ມຫາຊື່ເມຍທີ່ສຸດແສນຮັກແລະຊື່ຂອງເຈົ້າ...

ໄດ້ຍິນຄຳເວົ້າເຫລົ່ານັ້ນຂອງທ່ານປາກລິນເຕິນ, ນ້ຳຕາຂອງຂ້າພະເຈົ້າກໍພັງອອກມາຈາກສອງເບົ້າຕາຢ່າງບໍ່ຮູ້ສຶກຕົວ.

- ມິກລີຄື ເພື່ອນຜູ້ບໍລິສຸດທີ່ສຸດຂອງຂ້ອຍ, - ທ່ານປາກລິນເຕິນເວົ້າຕໍ່ໃນຂະນະທີ່ຂ້າພະເຈົ້າ

ຕັ້ງສະຕິມາໄດ້ແລ້ວ. - ລຸງເອງເປັນຜູ້ຕິດຕາມ ວານດິກ ຢູ່ນີ້, ໄດ້ຢືນຢັນວ່າ ວານດິກຂຽນຄຳລາຍງານຂອງເຂົາຢູ່ທີ່ໂຮງແຮມ "ເຈົ້າສະຫມຸດ" ແລ້ວເອົາໄປໂຮງໄປສະນີສົ່ງໄປຕາມບ່ອນຢູ່ "ຂ.ຊ." ແລະລຸງເອງກໍໄດ້ຮູ້ແຈ້ງວ່າໃຜເປັນຜູ້ຮັບຈົດຫມາຍເຫລົ່ານັ້ນ.

ວານດິກຫັນໃຈຍາວ.

- ທ່ານຫົວຫນ້າຫ້ອງການໄປສະນີຮັບຂອງຕ້ອນຂອງຂ້າພະເຈົ້າທຸກງອາທິດ...

ທ່ານ ປາກລິນເຕີນ ງຶກຫົວຢ່າງມີຄວາມກະລຸນາປານີ.

- ແຕ່ມີກລີໃຫ້ຂອງຕ້ອນແກ່ລາວຫລາຍກ່ວາ. ເຮົາມານີ້ເພື່ອຫຍັງ? ເຮົາຕ້ອງການບັນລຸການທົດລອງອັນຫນຶ່ງເພື່ອກວດກາຄືນເບິ່ງເປັນຄັ້ງສຸດທ້າຍ. ແລະກໍຕ້ອງທົດລອງຢູ່ໃນຮ່າງກາຍຂອງຄົນ. ຢູ່ພະມ້າ, ເຮົາອາດສາມາດຈ້າງຊາວທ້ອງຖິ່ນບຸກຄົນໃດບຸກຄົນຫນຶ່ງໄດ້, ແຕ່ຢູ່ນີ້? ຈະຕ້ອງໃຊ້ວິທີດປະເພດ "ຕົ້ນຫນາມຂອງຊາວບູສະແມນ" ທີ່ຖືກດັດແກ້ແລ້ວນັ້ນມາທຳການປ່ຽນແປງຢ່າງກະທັນຫັນໃນການປະກອບສ້າງທາດໂປຣຕີນໃນຮ່າງກາຍຂອງມະນຸດ, ຫລັງຈາກນັ້ນ ກໍຕ້ອງຟື້ນຟູລັກສະນະເດີມຄືນມາອີກ. ເຮົາບໍ່ອາດທີ່ຈະເຮັດໃຫ້ວຽກງານທີ່ໄດ້ດຳເນີນມາຕະຫລອດຊີວິດຂອງເຮົາສູນເສຍໄປໂດຍບໍ່ມີຜົນສຳເລັດຫຍັງ. ຈະຕ້ອງຊອກຫາຄົນທີ່ພວມສິ້ນຫວັງຄົນໃດຄົນຫນຶ່ງ. ລະດູໃບໄມ້ຫລົ່ນປີແລ້ວນີ້, ຢູ່ເທິງຝັ່ງເຫນືອງໃຫຍ່ ເວສະລີ ນັ້ນເຮົາໄດ້ພົບຊາຍຫນຸ່ມຄົນຫນຶ່ງພວມຈະໂດນລົງພົ້ນເຫມືອງເພື່ອຊຳລະສະສາງຊີວິດຕົນເອງ. ແຕ່ເມື່ອເຮົາເອົາຫມໍນັ້ນມາຮອດນີ້ແລ້ວ, ເຮົາກໍຮູ້ໄດ້ວ່າບົນເສັ້ນທາງຂອງເຮົາພັດກັບມາພົບກັບເຈົ້າ, ເຊມຸຍແອນ, ລູກຊາຍຂອງທ່ານປີນ ທັງເປັນລູກ ສິດຂອງຂ້ອຍທີ່ພະມ້າ, ແມ່ນຄົນຜູ້ທີ່ໄດ້ຊິດຊ່ວຍເອົາຂ້ອຍຢູ່ທີ່ແບັນຣັກບໍ ນັ້ນເອງ. ແລ້ວຂະນະນັ້ນ, ນັບເປັນຄັ້ງທຳອິດທີ່ຈິດໃຈຂອງຂ້ອຍມີຄວາມບໍ່ສະຫງົບເລີຍ.

- ຂໍທ່ານຢ່າໄດ້ຄິດວ່າຂ້າພະເຈົ້າຕັ້ງໃຈມາພົບກັບທ່ານ... - ຂ້າພະເຈົ້າກະວ່າຊິເວົ້າອອກມາເພາະຄຶດສະເດືອກຄວາມລະແວງສົງໄສຂອງເພິ່ນຕໍ່ຄວາມສຳພັນຂອງຂ້າພະເຈົ້າກັບ ວານດິກ.

- ຂະນະນັ້ນເຈົ້າມີວາດຊີງຂອງຄົນຜູ້ຫນຶ່ງທີ່ຕຽມພ້ອມຮັບເອົາຄວາມຕາຍ ເຖິງຂັ້ນວ່າຂ້ອຍບໍ່ມີຫຍັງຈະສົງໄສອີກ, ທ່ານ ປາກລິນເຕີນ ເວົ້າຢ່າງເປັນກັນເອງທີ່ສຸດ. ຂ້ອຍລັ້ງງລົງຢູ່ດົນເຕີບ. ແຕ່ໃນທີ່ສຸດ ຄວາມຮຽກຮ້ອງຕ້ອງການທາງດ້ານວິທະຍາສາດກໍເປັນຜູ້ຊະນະ. ເຈົ້າເຈັບ

ຫົວ. ຂ້ອຍເວົ້າວ່າອັນນັ້ນແມ່ນພະຍາດໄຂ້ຫມາກເຫລືອງ. ເຈົ້າເຊື່ອຂ້ອຍ. ຂ້ອຍໄດ້ອ້າງເອົາເງື່ອນໄຂປົວພະຍາດເພື່ອສີດວິຣຸດເຂົ້າຮ່າງກາຍຂອງເຈົ້າ. ຂ້ອຍກະວ່າຈະເຮັດວຽກງານທີ່ຄ້າງຄາຢູ່ນັ້ນຊ້ຳສາໂດຍບໍ່ໃຫ້ເຈົ້າຮູ້ຈັກ...

-ອາ, ຂ້າແດ່ອາດຍາເຈົ້າ! -ວານດິກຕົບມືແປະໆ. -ຢູ່ ມາຊາດລານ ກ້າແມ່ນຂ້າພະເຈົ້າບໍ່ໄດ້ເຮັດໃຫ້ທ່ານສົງໄສ, ທ່ານກໍຈະສີດສິນບັດອັນນັ້ນໃສ່ໃຫ້ຂ້າພະເຈົ້າແລ້ວແມ່ນບໍ່? ດ້ວຍເຫດນັ້ນ ທ່ານ ຈຶ່ງເຊື່ອງແວ່ນ ແລະແກຸຫນວດໃຫ້ຂ້າດ້ວຍມືຂອງທ່ານເອງສອງຄັ້ງ...

-ເຈົ້າຕວງເກັ່ງຫລາຍ! -ທ່ານ ປາກລິນເຕີນຫົວ. -ແຕ່ເມື່ອເຈົ້າເຮັດຫລອດແກ້ວບັນຈຸວິຣຸດນັ້ນແຕກແລ້ວກໍຊ່ຳກັບວ່າເຈົ້າໄດ້ຈັດການກັບຕົວຂອງເຈົ້າເອງ. ເມື່ອ ເຊມຸຍແອນລັກຫລອຍໄປ ແອຊູໂອເຣີ ຈາກຂ້ອຍ ແລະກໍບໍ່ມີໃຜຈຳລາວໄດ້ນັ້ນ ປະກົດວ່າ ລາວຕວງໄດ້ແລ້ວ. ຂະນະນັ້ນລາວໄດ້ສ້າງຄວາມອົບລະຫົບວົບວາຍຂຶ້ນຕະພຶດ, ແລ້ວຂ້ອຍກໍຕ້ອງປັ້ນເລື່ອງບໍ່ເປັນສາເຫດກ່ຽວກັບງູ ເດີຍເຣີ ມາເລົ່າໃຫ້ລາວຟັງ...

-ດຽວນີ້, ເລື່ອງນັ້ນມັນຜ່ານພົ້ນໄປແລ້ວ, -ຂ້າພະເຈົ້າຕອບ.

-ຄັນຊັ້ນພວກເຮົາຈະເລົ່າເລື່ອງປະຈຸບັນ, -ທ່ານ ປາກລິນເຕີນ ເວົ້າແລະຈັບເອົາຊອງຈົດຫມາຍໃຫຍ່ທີ່ປະທັບຕາເຄື່ອງຫມາຍຊາດນັ້ນຂຶ້ນມາຈາກໂຕະ. -ຟັງນີ້, ເຊມຸຍແອນ, -ເພິ່ນເວົ້າແລະແນມເບິ່ງຕາຂອງຂ້າພະເຈົ້າ. -ກ່ອນນີ້ຫນຶ່ງເດືອນຂ້ອຍໄດ້ສົ່ງຕົ້ນສະບັບຂອງຕົນຂຶ້ນຫາສະມາຄົມວິທະຍາສາດການແພດ. ຂ້ອຍໄດ້ວາດພາບເຖິງການປະດິດຄົ້ນຄວ້າແລະການທົດລອງທັງຫມົດຂອງຂ້ອຍ. ຂ້ອຍລໍຖ້າຈົດຫມາຍຕອບທີ່ຈະເປັນການຕັດສິນຊາຕາກໍາຂອງຂ້ອຍ. ເຊື່ອແນ່ວ່າຂ້ອຍຕ້ອງໄດ້ຮັບການເລື່ອນຕຳແຫນ່ງຍ້ອນບັນດາການເຄື່ອນໄຫວທາງວິທະຍາສາດຂອງຂ້ອຍ. ແຕ່ແລ້ວຕອນຄ່ຳວານນີ້ ຂ້ອຍກໍໄດ້ຮັບຈົດຫມາຍຕອບ. ເຈົ້າອ່ານເບິ່ງແມະນີ...

ໃນໃບເຈ້ຍອ່ອນໆເຫລື້ອມໆນັ້ນ, ຢູ່ກ້ອງເຄື່ອງຫມາຍປະຈຳຊາດແມ່ນບັນດາລາຍລັກອັກສອນ: "ທ່ານໂດບີ ທີ່ນັບຖື.

ອີງໃສ່ຄຳລາຍງານຂອງກຳມະການຜູ້ມີຄວາມຮັບພິດຊອບສຳຄັນທ່ານຫນຶ່ງຂອງສະມາຄົມຄົ້ນຄວ້າແລະປະດິດແຕ່ງກ່ຽວກັບຄຳແຈ້ງການເປັນທາງການຂອງທ່ານ ເຊິ່ງເວົ້າເຖິງບັນຫາ

ຄວາມຮູ້ທາດແທ້ຂອງອັນທີ່ເອີ້ນວ່າ ວິຣຸດ ນັ້ນ, ທ່ານໄດ້ຮັບເງິນລາງວັນອຸດຫນູນກິດຕິມະສັກປີລະຫນຶ່ງພັນຫລຽນຕະຫລອດຊີວິດ, ສະເພາະວົງການນັກປາດທັງຫລາຍແລ້ວ, ນັບວ່າເປັນລາງວັນອັນສູງທີ່ສຸດ ທາງດ້ານກິດຈະກຳຊີວະວິທະຍາ.

ຂະນະທີ່ສົ່ງຄວາມນັບຖືອັນສູງສົ່ງ ໃນນາມສ່ວນຕົວຂອງຂ້າພະເຈົ້າແລະເພື່ອນຮ່ວມງານທັງຫລາຍມາຍັງທ່ານນີ້, ຂ້າພະເຈົ້າມີຄວາມປິຕິຍິນດີຢ່າງຍິ່ງ ເມື່ອຮູ້ວ່າຕົນມີພາລະທີ່ຈະຕ້ອງແຈ້ງມາໃຫ້ທ່ານຊາບວ່າ ບັນດາເອກະສານກ່ຽວກັບວິຣຸດຂອງທ່ານ ໄດ້ຖືກນຳສົ່ງໄປຍັງຄະນະກຳມະການຮັບຜິດຊອບວິຊາສະເພາະ, ສ່ວນຄຳຕົກລົງກ່ຽວກັບເງິນອຸດຫນູນກິດຕິມະສັກນັ້ນແມ່ນສົ່ງໄປຍັງສູນການເງິນເພື່ອປະຕິບັດການ.

ຫວັງວ່າທ່ານຈະຮັບຄຳຫມັ້ນສັນຍາຈາກຂ້າພະເຈົ້າແລະອື່ນໆ...

ວານດິກ ຍືນຂຶ້ນຈາກຕັ່ງແລະຮ້ອງຂຶ້ນ:

-ຂ້າຂໍພະນັນວ່າ ແມ່ນທ່ານ ລໍເດີ ປາກລິນເຕີນ... ຫມາຍຄວາມວ່າ ແມັກແລ້ງ ເປັນຜູ້ລົງນາມຢູ່ລຸ່ມນີ້!

-ບໍ່, -ຂ້າພະເຈົ້າຕອບ. -ລາຍເຊັນບໍ່ຈະບໍ່ແຈ້ງເລີຍ...

-ໃຜເຊັນກໍບໍ່ສຳຄັນດອກ. -ທ່ານ ປາກລິນເຕີນ ຫົວເຍາະເຍີ້ຍ. -ເປັນທີ່ຈະແຈ້ງວ່າໂດບີສາມາດເອີ້ນຊື່ຕົນເອງດ້ວຍທຸກໆຊື່ທີ່ເພິ່ນຄິດຈະເອີ້ນໄດ້: ມິນໂຮຍເຊີ ຫລືວ່າ ໂຮນເຊີ. ແຕ່ເພິ່ນບໍ່ສາມາດຈະກາຍເປັນທ່ານລໍເດີຄືເມື່ອກ່ອນໄດ້ອີກແລ້ວ.

ວານດິກເສີຍພົມໄປທາງອື່ນ.

-ຂ້າແດ່ທ່ານຜູ້ໃຫຍ່, ຍາກທີ່ຈະຕໍ່ສູ້ກັບພວກແມັກແລ້ງໄດ້. ດຽວນີ້ ຂ້າພະເຈົ້າຮູ້ແຈ້ງຫມົດທຸກຢ່າງ "ຄືກັບແນມເບິ່ງໃນກ້ອງຈຸລະທັດ" ນີ້ແຫລະ. ແມ່ນແລ້ວ, ອີຕາຕຸ້ຍທີ່ເຄີຍດື່ມໂຊດາຢູ່ຮ້ານຂາຍຢານັ້ນ ລາວເວົ້າຈັ່ງຊັ້ນເດ. ເອົາລະ, ເຊມຸຍແອນ... ອອກໄປຈາກນີ້ແລ້ວໂຕຫາລະກົງກ້າມແຂນ, ກົ້ກ້າມແຂນ, ກົ້ກ້າມຂາເຂົ້າຊົດວ່ອຍເຮົາເຕັມມັກສາ. ເຮົາກຽມພ້ອມຮັບເອົາຫມັດກຳປັ້ນທີ່ໂຕໄດ້ທົນຕາງເຮົາມາ. ຕອນນີ້ ຊົດເຮົາຈັກສອງສາມຫມັດກໍໄດ້. ເຮົາມີໂທດກຳຍອນໄດ້ຊ່ວຍຄົນຄື ແມັກແລ້ງ.

ຄວາມງຽບສະຫງັດອັນຫນັກຫນ່ວງຍືດເຍື້ອນອອກໄປຄາວຫນຶ່ງ. ຂ້າພະເຈົ້າເຂົ້າໃຈແຈ່ງ

ທຸກຢ່າງແລ້ວ. ເມື່ອແນມເບິ່ງໃບໜ້າຂອງ ລໍເດີ ປາກລິນເຕີນຄືນເກົ່າ ຫົວໃຈຂອງຂ້າພະເຈົ້າປະກົດວ່າຈົມຢູ່ໃນຄວາມຫມອງໄຫມ້, ເຈັບຊ້ຳອັນເລິກເຊິ່ງ.

ແຕ່ເພິ່ນບໍ່ໄດ້ໂສກເສົ້າຫງົວມເຫງົາເລີຍ.

-ເອົາລະ, ພວກເພື່ອນ! -ເພິ່ນເວົ້າຢ່າງສິດຊື່ນ. -ຈົ່ງຊ່ວຍຂ້ອຍເອົາເຄື່ອງຫມາຍລໍເດີແອຊູໂອເຣີ ນີ້ຖິ້ມໃສ່ໄຟແດ່. ເບິ່ງນີ້, ຂ້ອຍໄດ້ອອກແບບເຄື່ອງຫມາຍໄວ້ໃຫ້ຕົນເອງແລ້ວ. ຢູ່ເທິງເຂນຂ້ອຍໄດ້ຂຽນຄຳຂວັນອັນຫນຶ່ງໃສ່: "ມູນເຊື້ອແລະຄວາມເຊື່ອຫມັ້ນ" ແຕ່ມັນໄດ້ປະລາໄຊໃຫ້ແກ່ຄວາມອະຄະຕິແລະຄວາມຜິດພາດ, ຫາລະປ່ອຍໃຫ້ມັນໄຫມ້ວູ່ງໄປສາ...

ທ່ານ ປາກລິນເຕີນ ເອົາຈົດຫມາຍກ່ອງກັບເງິນອຸດຫນູນກິດຕິມະສັກນັ້ນຖິ້ມໃສ່ກອງໄຟ, ຕໍ່ມາກໍແມ່ນຊອງຈົດຫມາຍຕ່າງໆ, ບັນດາເຈ້ຍສໍອັນໃດອັນຫນຶ່ງ, ຮູບຂອງຍິງສາວທີ່ຄ່ອມຄົມຄົນຫນຶ່ງໃສ່ສາຍຄໍໄຂ່ມຸກລາຄາແພງຢູ່ເທິງລຳຄໍອັນລະຫົງ, ບັນດາສະຫມຸດບັນທຶກແລະບັນດາເສດເຈ້ຍ...

ຮູບແຕ້ມດ້ວຍສີນ້ຳຢູ່ເທິງແຜ່ນເຈ້ຍແຂງກືກວານດົກຈັບຍັດເຂົ້າໃນເຕົາໄຫມ້ຂົດເຂົ້າເປັນກ້ານຢູ່ດົນເຕີບ, ໃນທີ່ສຸດກໍລຸກອື້ຂຶ້ນ, ເຄິ່ງຫນຶ່ງກາຍເປັນຂີ້ເທົ່າໄປ.

-ບໍ່ວ່າຕິທ່ານຊິຢາກຈູດຖິ້ມແມ້ກະທັ້ງຜົນງານຂອງຕົນ? -ຂ້າພະເຈົ້າພຶມພຳ. ທັງຕາແນມເບິ່ງກອງໄຟຢູ່ໃນເຕົາຜີງ. -ກ້າທ່ານອິດເມື່ອຍໄປ, ແລະບໍ່ຢາກຄົ້ນຄ້ວາວິທະຍາສາດອີກແລ້ວ, ກໍຂໍຈົ່ງຄຶດເຫັນ ລີເຢີ... ຄຶດເຫັນຂ້າພະເຈົ້າແດ່...

-ເຈົ້າເວົ້າກຶກ, ທ້າວເອີຍ, -ທ່ານ ປາກລິນເຕີນ ເວົ້າດ້ວຍຄວາມຫວາງອົກຫວາງໃຈ. -ທັງສອງຄົນລ້ວນແຕ່ເປັນລູກສິດຂອງຂ້ອຍ. ຍ້ອນມີສອງຄົນນີ້ ຂ້ອຍກໍເລີຍຮູ້ສຶກວ່າຕົນຍັງຫນຸ່ມ. ບໍ່ຕ້ອງວິຕົກ, ຂ້ອຍຈະບໍ່ຢຸດຕິການເຮັດວຽກທຳງານດອກ, ແລະກໍບໍ່ຕ້ອງອີຕົນສົງສານຂ້ອຍເລີຍ. ສິ່ງປະເສີດທີ່ສຸດຂອງຂ້ອຍທີ່ຍັງເຫລືອຢູ່ນີ້ ແມ່ນວິທະຍາສາດຂອງຂ້ອຍ. ຂ້ອຍກໍຈະບໍ່ໂດດດ່ຽວ: ໄວຫນຸ່ມຂອງພວກເພື່ອນແມ່ນບ່ອນອີງຂອງຂ້ອຍ, ແມ່ນກຳລັງສຳຮອງຂອງຂ້ອຍ. ກຳລັງດັ່ງກ່າວ ຈະກ້າວເຂົ້າສູ່ສະຫນາມຮົບຕ້ານຕໍ່ຄວາມອະຄະຕິກ່ຽວກັບວິທະຍາສາດ. ສິ່ງທີ່ຂ້ອຍຈູດຢູ່ນີ້ມັນເປັນພຽງສິ່ງມະຫລົດປົດປີ່ ແລະວຽກງານສ່ວນຕົວຊື່ໆດອກ.

ສ່ວນສຳເນົາສະສົມທາງວິທະຍາສາດຂອງຂ້ອຍມັນຢູ່ສຳນັກງູພຸ້ນ. ຕອນເຊົ້ານີ້ຂ້ອຍໄດ້ຮັບໂທລະເລກທີ່ຫນ້າວິຕົກສະບັບຫນຶ່ງຂອງນາງ ລີເຢີ ນາງບອກມາວ່າ ມີເຫດພິນສຳຄັນທີ່ສຸດບັງຄັບໃຫ້ຕ້ອງຍົກຍ້າຍສະກາບັນຄົ້ນຄ້ວາແລະບັນດາສຳເນົາສະສົມຂອງຂ້ອຍ ອອກຈາກພະນ້າໄປທາງຕາເວັນຕົກດ່ວນ. ນາງຊອກໄດ້ສະຖານທີ່ເຫມາະສົມບ່ອນໃດບ່ອນຫນຶ່ງແລ້ວຢູ່ບໍລິເວນແປັນຍາບເຫນືອ. ນາງຂໍຮ້ອງໃຫ້ຂ້ອຍໄປທີ່ນັ້ນດ່ວນ. ຂ້ອຍໄດ້ຕີສາຍໄປແລ້ວແລະລໍຖ້າຄຳຕອບຢູ່.

- ຂ້າພະເຈົ້າຈະໄປນຳທ່ານ. - ຂ້າພະເຈົ້າກ່າວອ້ອນວອນເພິ່ນທັນທີແລະກໍຟ້າວຫຸບປາກທັນທີເມື່ອຄຶດເຖິງເອດີ.

ວານດິກ ລຸກຂຶ້ນແລະໂນ້ມຕົວຢ່າງສຸພາບ.

- ຂ້າແດ່ຍາທ່ານ ຈົ່ງອະນຸຍາດໃຫ້ຂ້າພະເຈົ້າໄປນຳຜູ້ຫນຶ່ງ. ຂ້າພະເຈົ້າພົ່ມວິຊາອາຊີບເຊັ່ນນີ້ປະກົດວ່າມັນຫລ້າສວາຍເກີນໄປສາແລ້ວ. ແຕ່ເຊື່ອວ່າ ຝູງງູ ເດີຍິເຣີ ຈະຕ້ອງເຂົ້າຮູບເຂົ້າຮອຍຕ່ອມເດາະຕ່ອມຕ້ອຍນຳຂ້າພະເຈົ້າ. ຍາທ່ານມີຄຳສັ່ງໃຫ້ເອົາຝູງງູທັງຫມົດເຫລົ່ານັ້ນໄປບ່ອນໃດ ຂ້າພະເຈົ້າຈະເອົາໄປບ່ອນຫັ້ນ, ເຖິງຈະຕ້ອງເອົາພວກມັນຂຶ້ນສູ່ຈອມພູຫິມະໄລຍານຳຍັງໄດ້. ຂໍຍາທ່ານຈົ່ງຫຸ່ນໃຈ. ນ້ຳເບີ ສີ່ຮ້ອຍຊາວເອັດ, ດວງນີ້ກໍກລືບອອກຈາກບັນຊີລາຍຊື່ຂອງພົນລະເມືອງທີ່ດຳລົງຊີວິດຢູ່ເທິງພິພົບຂອງພວກເຮົາຫນ່ອຍນຶ່ງໄປຕະຫລອດການແລ້ວ. ຍັງເຫລືອຢູ່ພຽງດິກວານດິກເທົ່ານັ້ນ...

ມັນຫາງ່ງງຫູຟັງ. ລົດຈັກຄັນຫນຶ່ງພວມແລ່ນຕາມທາງປູຍາງມຸ່ງຫນ້າມາຍັງຄະລີຫາດ.

## VI

ລຸງມິກລີ ຍ່າງເຂົ້າມາໃນຫ້ອງ, ສອງມືໂຈມກະຖາດນ້ອຍໃບຫນຶ່ງທີ່ເຮັດດ້ວຍເງິນ.

- ຂ້າແດ່ທ່ານ, ມີໂທລະເລກຮຽນເຖິງອາດຍາ, - ລຸງເວົ້າຢ່າງເຄັ່ງຂຶມ.

ທ່ານ ປາກລິນເຕີນ ຈັບເອົາໂທລະເລກຂຶ້ນມາຈາກກະຖາດ, ເພິ່ນໄຂອອກມາອ່ານແລ້ວຍືນຂຶ້ນ.

- ມິກລີ!

-ໂດຍຂະນ້ອຍ, -ລຸງ ມິກລີ ໂນ້ມຫົວລົງດ້ວຍຄວາມເຄົາລົບ.

-ເອີ້ນລິດໂອໂດ ມາດ່ວນ! ທ່ານປາກລິນເຕີນອອກຄຳສັ່ງ. -ເອົາເສື້ອມາໃຫ້ຂ້ອຍນຸ່ງ. ຜູ້ຫນຶ່ງຈະຕ້ອງໄປນຳຂ້ອຍ... -ທ່ານປາກລິນເຕີນ ແນມເບິ່ງ ວານດິກ, ແລ້ວແນມເບິ່ງຂ້າພະເຈົ້າ, ແລ້ວກໍແນມເບິ່ງວານດິກ ອີກ, -ວານດິກ ຈະເປັນຜູ້ໄປ, -ເພິ່ນເວົ້າຕື່ມດ້ວຍສຽງສັງບຂາດ. -ຕາມເຈົ້າຄຶດໄປທາງໃດມໍ່ກ່ວາ?

-ຂ້າແດ່ທ່ານ, ຂີ່ລົດໄປສະຫນາມບິນຝັ່ງບູລະພາ. ຂີ່ເຮືອບິນຈາກຫັ້ນໄປລິດສະບອນ. ຮອດມາຣີກ, ຂີ່ຍົນເລາະໄປຕາມຝັ່ງທະເລເຫນືອຂອງທະວີບອາຟະລິກກາ, ຜ່ານເອຢິບ, ຜ່ານຄອງຊູເອດ, ຜ່ານສີລັງກາ, ສ່ວນຈາກ ໂຄລົມໂບ ຈະໃຊ້ເວລາຂີ່ເຮືອເຫາະສະຫມຸດສາມຊົ່ວໂມງກໍຈະເຖິງຮັງກູນ.

-ແມ່ນ, -ທ່ານປາກລິນເຕີນເວົ້າ. -ພວກເຮົາຈະໂທລະເລກຈາກ ລິດສະບອນໄປບອກໃຫ້ລີເຢີ ຮູ້ຈັກກຸ້ງວບິນຂອງພວກເຮົາ. ສ່ວນເຈົ້າ ເຊມຸຍແອນເອີຍ ຢ່າເສຍໃຈເດີ. ຂ້ອຍຈະບໍ່ຈາກເຈົ້າໄປເລີຍດອກ. ຂ້ອຍຈະກັບມາ. ຂ້ອຍຮູ້ດີວ່າ ຂ້ອຍມີຄວາມຈຳເປັນສຳລັບນະທີນີ້, ແລະສຳລັບບ້ານເກີດເມືອງນອນຂອງຂ້ອຍ. ສ່ວນເຈົ້າຄວາມສຸກສົດຊື່ນອັນຍິ່ງໃຫຍ່ຫລາຍຢ່າງພວມລໍຖ້າເຈົ້າຢູ່ທີ່ ແອຊູໂອເຣີ. ເຈົ້າຢູ່ນີ້ກັບລຸງ ມິກລີ, ລາວນັ້ນຊິໃຫ້ເຈົ້າກິນເຈົ້າຢູ່, ມື້ອື່ນເຊົ້າຈຶ່ງກັບເມືອເຮືອນ. ຂ້ອຍປະເຈົ້າໄວ້ນີ້ເພື່ອຊ່ວຍວຽກລຸງມິກລີ, ທັງສອງຄົນມີຫນ້າທີ່ຮັບຜິດຊອບປ້ອງກັນເຮືອນຫລັງນີ້. ຂ້ອຍຈະກັບມາແລະເດັດຂາດວ່າຕ້ອງໃຫ້ຂ້ອຍໄດ້ເຫັນວຽກງານທຸກສິ່ງທຸກຢ່າງເຂົ້າຮູບເຂົ້າຮອຍດີ.

-ຂໍທ່ານ ຈົ່ງອຸ່ນອົ່ງນໃຈ! -ຂ້າພະເຈົ້າເວົ້າຂຶ້ນດ້ວຍຄວາມຈິງໃຈ.

ເຊັ່ນດັ່ງທີ່ເຄີຍເຫັນມາກ່ອນຈະມີການເດີນທາງອັນຮີບດ່ວນນັ້ນແລ້ວ, ໃນເຮືອນເລີ່ມມີຮູບພາບແລ່ນໄປແລ່ນມາສັບສົນອົນທະການຂຶ້ນ. ສ່ວນຂ້າພະເຈົ້າ, ໃນຂະນະທີ່ຊ່ວຍລຸງມິກລີ ຢູ່ຢ່າງຂະຫຍັນຂັນແຂງນັ້ນ, ກໍບໍ່ໄດ້ຍິນສຽງແກລົດທີ່ບີບເອີ້ນຢູ່ນອກປະຕູໂຂງພຸ້ນຊໍ້າ.

ແລ້ວພວກເຮົາຫມົດທຸກຄົນກໍລົງຂັ້ນໄດທັງຫິ້ວຫີບເດີນທາງຂອງຜູ້ທີ່ຈະຈາກໄປ. ຂ້າພະເຈົ້າສວຍໂອກາດພາ ວານດິກໄປທີ່ແຈຫນຶ່ງ ແລ້ວບີບແຂນຂອງຫມໍໄວ້ແຫນ້ນໆ.

-ຟັງເດີ ວານດິກ, ຖ້າເຈົ້າຫລິ້ນສົກກະປົກອີກ, ຂ້ອຍຈະຊັດຫນ້າເຈົ້າໂລດລະ.

-ຂໍຮັບດ້ວຍກຸນ, ເຊນຸຍແອນເອີຍ. -ລາກ່ອນ. ວານດີກເນນຈ້ອງຕາຂ້າພະເຈົ້າຢ່າງ ຈີ່ຈໍ້. ແລ້ວທັນໃດນັ້ນເຂົາກໍກອດຂ້າພະເຈົ້າໄວ້ແໜ້ນ.

ຈາກນັ້ນ ເຂົາເຈົ້າທັງສອງກໍຈາກໄປ.

ຂ້າພະເຈົ້ານັ່ງຢູ່ໃນຫ້ອງກິນເຂົ້າຈົນຮອດແຈ້ງ. ລຸງ ມິກລີ ລ້ຽງຂ້າພະເຈົ້າດ້ວຍອາຫານ ແລງທີ່ແຊບທີ່ສຸດຄາບໜຶ່ງ. ສ່ວນຂ້າພະເຈົ້າກໍໄດ້ເລົ່າໃຫ້ລຸງຟັງຢ່າງລະອຽດກ່ຽວກັບນາງສາວ ລີເຢີຂອງລຸງ. ລຸງເອົາຮູບມາໃຫ້ຂ້າພະເຈົ້າເບິ່ງ. ລີເຢີ ຢືນຢູ່ເທິງຊານມີນຂອງເຮືອນຫລັງ ນັ້ນ, ໃນຊຸດນຸ່ງຢູ່ກັບເຮືອນລາຍແຊກ ແລະກຳງູອິກຊູທີ່ພວມນອນຫລັບໂຕໜຶ່ງຢູ່ໃນມື. ຮູບ ໃບນັ້ນສ້າງຄວາມປະທັບໃຈໄດ້ຢ່າງຮຸນແຮງທີ່ສຸດ, ແຕ່ ລຸງມິກລີ ຊໍ້ຊຸ່ນເຄືອງ:

-ຊິກ່າຍກັບໃຜກໍບໍ່ກ່າຍ. ມາກ່າຍກັບງູ. ໄດ້ແຕ່ຊ່າງປັ້ນເລື່ອງນັ້ນແຫລະ!

ລຸງມິກລີ ໄດ້ເລົ່າໃຫ້ຂ້າພະເຈົ້າຟັງຫລາຍຢ່າງກ່ຽວກັບທ່ານລໍເດີ ປາກລິນເຕິນ.

-ເພິ່ນເປັນຄົນມັກຢູ່ໂດດດ່ຽວ, ດ້ວຍເຫດນັ້ນຈຶ່ງບໍ່ມີເພື່ອນ. ແຕ່ຕໍ່ສະເພາະຂ້ອຍ ພໍ່ຂອງເຈົ້າແລະຕໍ່ລູກສາວຂອງຂ້ອຍແລ້ວ ຍາມໃດເພິ່ນກໍມີເມດຕາປານີຢູ່ສະເໝີ. ແລ້ວນັບ ທັງເຈົ້າອີກ, ເຊນຸຍແອນ, ເພິ່ນຮັກແພງເຈົ້າທີ່ສຸດ. ເພິ່ນເຄີຍໃຊ້ຂ້ອຍເອົາເງິນເດືອນຂອງ ເຈົ້າໄປຝາກທະນາຄານ ແອຊູໂອເຣີ, ລົງຊື່ຂອງເຈົ້າ ແລ້ວເພິ່ນຍັງຈົດບັນຊີເງິນໃສ່ຕື່ມຈຳນວນ ໜຶ່ງອີກ. ເຊນຸຍແອນ, ເປັນອັນວ່າ ເຈົ້າມີເງິນເລັກນ້ອຍ ເພື່ອຈະຊື້ສິ່ງຕ້ອງການຕ່າງໆໃນ ເບື້ອງຕົ້ນແລ້ວ.

ຕໍ່ຈາກນັ້ນແມ່ນເລື່ອງທີ່ເວົ້າເຖິງພໍ່ຂອງຂ້າພະເຈົ້າ ແລະບັນດາເວລານາທີສຸດທ້າຍຂອງ ເພິ່ນ, ໃນທີ່ສຸດ ເມື່ອລຸງ ມິກລີ ໄປຫ້ອງນອນຂອງຕົນແລ້ວ, ຂ້າພະເຈົ້າກໍໄດ້ປ່ອຍໃຫ້ຕົນ ໄດ້ຮ້ອງໄຫ້ເຕັມມັກ. ຂ້າພະເຈົ້າໃຫ້ສົງສານພໍ່ຜູ້ຍາກຈົນຂອງຂ້າພະເຈົ້າ ເພາະເພິ່ນບໍ່ມີໂອກາດ ໄດ້ແນມເຫັນຄວາມສຸກອັນແທ້ຈິງໃນຊີວິດຂອງເພິ່ນ, ພ້ອມກັນນັ້ນ, ກໍຍັງບໍ່ທັນມີຈັກເທື່ອ ທີ່ຂ້າພະເຈົ້າຮູ້ສຶກວ່າຄວາມສຸກຂອງຕົນພວມຫຍັບໃກ້ເຂົ້າມາຄືໃນຂະນະນີ້. ພຽງແຕ່ເດ່ມື ອອກມາ ກໍຈະສາມາດຄ້ວາເຖິງມັນແລ້ວ. ຄວາມອິດສາຕາຮ້ອນທັງໝົດຕໍ່ບົບ, ຄວາມໂສກ

ເສົ້າເຫງົາລະທົມແລະຄວາມວິຕົກກັງວົນທຸກຢ່າງ ລ້ວນແຕ່ລະລາຍຫາຍສາບສູນໄປພ້ອມກັບສາຍນ້ຳຕາໃນຄ່ຳຄືນນັ້ນ.

ຍ້ອນເມື່ອຍເພຍເປ້ຍອ່ອນ, ຂ້າພະເຈົ້າຈຶ່ງເຊືອບຫລັບໄປເທິງຕັ່ງນອນ. ແສງແດດແຫ່ງດວງອາທິດໄດ້ເຮັດໃຫ້ຂ້າພະເຈົ້າຕື່ນຂຶ້ນມາ. ຂ້າພະເຈົ້າອາບນ້ຳຊຳລະຮ່າງກາຍ, ແຖຫນວດ, ຫວີຫົວຄັກແນ່. ລຸງມິກລີ ເອົາເຄື່ອງນຸ່ງຊຸດຫນຶ່ງມາໃຫ້ຂ້າພະເຈົ້າ. ຈາກນັ້ນຂ້າພະເຈົ້າກໍອຳລາຈາກບິດາຜູ້ບັງເກີດເກົ້າຂອງນາງ ລີເຢີ.

ຂ້າພະເຈົ້າລົງໄປສູ່ຕົວເມືອງທີ່ແສນຮັກແພງແລະທັງຄຶດ: ບໍ່ຕ້ອງພ້າວຟັ່ງຫຍັງດອກ. ຕ້ອງລໍຖ້າໃຫ້ຫ້າງຮ້ານຕ່າງໆໄຂສາກ່ອນ. ຂ້າພະເຈົ້າຈະຊື້ເອົາຂອງຕ້ອນຈຳນວນນ້ອຍຫນຶ່ງໄປຕ້ອນລຸງ, ຕ້ອນແມ່ເຖົ້າໂອລີວີອາ ແລະຕ້ອນ...

ແຕ່ເມື່ອງມິເບິ່ງກະເປົາຂ້າພະເຈົ້າຈຶ່ງຮູ້ວ່າມັນເປົ່າ. ຂ້າພະເຈົ້າບໍ່ເຫລືອເງິນພໍອັດເລີຍ. ເລື່ອງນີ້ມັນພາໃຫ້ຂ້າພະເຈົ້າອຸກໃຈ. ທະນາຄານກໍຮອດສິບສອງໂມງພຸ້ນຈຶ່ງເປີດ.

ຂ້າພະເຈົ້າຍ່າງໄປຕາມທາງປູຫີນຢ່າງງຽບໆ. ຫັ້ນເດ, ບັນດາຮ່ອງຮອຍທີ່ຍັງເຫລືອຄ້າງຢູ່ຂອງຕົ້ນໂອກໄຟໄຫມ້ ແລະແຜ່ນພິມແຫ່ງບຸບຜາຊາດສີອິດອັນງາມປານິດພິດສະດານພວມເບີຍບານອອກມາສູ່ຮຸ່ງອາລຸນວັນໃຫມ່. ຂ້າພະເຈົ້າເກັບເອົາດອກໄມ້ອັນນິ້ມນວນທີ່ຍັງຊຸ່ມນ້ຳຫມອກແຫ່ງລາຕີການນັ້ນພວງຫນຶ່ງ. ຂ້າພະເຈົ້າສູດດັງດົມກິ່ນຫອມອັນນິ້ມນວນຂອງມັນດ້ວຍຄວາມສະບາຍອາລົມ. ພ້ອມກັບກິ່ນເກສອນເຫລົ່ານັ້ນ ບັນຍາກາດອັນສົດຊື່ນແຈ່ມໃສແຫ່ງມາຕຸພູມໄດ້ຊືມຊາບເຂົ້າໃນສ່ວນເລິກຂອງຫົວໃຈຂ້າພະເຈົ້າ. ທີ່ລະນຶກທຸກຢ່າງຂອງໄວເຍົາແລະໄວສອນບ່າວພຸ່ງເຂົ້າມາສູ່ວິນຍານຂອງຂ້າພະເຈົ້າຄືຫົວລົມກົດ. ຂ້າພະເຈົ້າຮູ້ສຶກວ່າບໍ່ເຄີຍໄດ້ຈາກແຫ່ງນີ້ໄປຈັກເທື່ອແລະຍາມໃດກໍຢູ່ໃນນະທີ່ນີ້ສະເຫມີມາ...

ຂ້າພະເຈົ້າກົກບາດກ້າວແລະເກືອບຈະວ່າແລ່ນລົງສູ່ທາງປູຢາງ, ຂ້າພະເຈົ້າຮູ້ສຶກວ່າດວງອາທິດສ່ອງໃສຂຶ້ນເປັນພິເສດ; ປະກົດວ່າມັນພວມຕ້ອນຮັບການກັບມາຂອງຂ້າພະເຈົ້າດ້ວຍຄວາມມ່ວນຊື່ນຕື້ນຕັນ, ຂ້າພະເຈົ້າແລ່ນຜ່ານຂົວນ້ອຍນັ້ນ ແລ້ວຢຸດຢືນລໍ່ແຍງເບິ່ງ ແອຊູໂອເຣີ. ແຕ່ແລ້ວຂ້າພະເຈົ້າກໍໄດ້ແນມເຫັນ ເອດີ.

ນາງຍ່າງມາເບື້ອງທິດກົງກັນຂ້າມກັບຂ້າພະເຈົ້າ, ກົ້ມໜ້າດ້ວຍອາການຫງອຍເຫງົາແລະຄັ້ນຄຶດ.

- ເອດີ!... - ຂ້າພະເຈົ້າຮ້ອງຂຶ້ນແລະແລ່ນໄປຫານາງ.

ນາງເງີຍໜ້າແນມເບິ່ງຂ້າພະເຈົ້າດ້ວຍດວງຕາໃຫຍ່ແລະອົງອາຍ. ແລ້ວຮອຍຍິ້ມໄຮ້ດຽງສາທີ່ເຈືອຈານຢູ່ໃນຄວາມສຸກຊື່ນນັ້ນ ໄດ້ເຮັດໃຫ້ໃບໜ້າຂອງນາງມີຄວາມສະຫວ່າງໃສຂຶ້ນ.

- ອ້າຍ ເຊມຸຍແອນ! ອ້າຍ ເຊມຸຍແອນທີ່ຮັກ! - ນາງພຶມພໍາຄ່ອຍໆ.

ພວກເຮົາຈັບມືກັນ.

- ເອດີ, ອ້າຍກັບມາແລ້ວ. ນ້ອງໃຫຍ່ຂຶ້ນຫລາຍແລ້ວເດີ! ເກືອບຈື່ນ້ອງບໍ່ໄດ້.

- ສ່ວນອ້າຍ... ອ້າຍບໍ່ປ່ຽນແປງຫຍັງເລີຍ. ມີແຕ່... - ນາງແນມລີງ, - ມີແຕ່... ດີຂຶ້ນກວ່າເກົ່າຫລາຍ.

- ນ້ອງຍັງຮັກອ້າຍຢູ່ບໍ່ລະ? - ຂ້າພະເຈົ້າຖາມແລະມອບພົ້ວດອກໄມ້ສີອິດນັ້ນໃຫ້ນາງ.

- ຂອບໃຈທີ່ຮັກ, - ນາງພຶມພໍາແລະຮີມສົບອຸ່ນໆທັງຄູ່ຂອງນາງຊຸນຢູ່ໃນແກ້ມຂອງຂ້າພະເຈົ້າຄາວໜຶ່ງ. - ແນ່ນອນນ້ອງຮັກອ້າຍ.

ພວກເຮົາຍ່າງຊ້າໆໄປຕາມເສັ້ນທາງຢາງ. ຕະຫລອດຊີວິດມີພຽງຄັ້ງດຽວເທົ່ານັ້ນທີ່ຂ້າພະເຈົ້າຈະຢາກກ່ວງດຶງເວລານາທີໃຫ້ມັນຍືດເຍື້ນຕະຫລອດໄປ.

- ນ້ອງຄອຍຮັກອ້າຍຢູ່ສະເໝີ, - ເອດີເວົ້າ. - ແຕ່ມື້ຊືນອ້າຍໄປທີ່ຮ້ານນໍ້າ... ນ້ອງເຮັດວຽກຢູ່ຫັ້ນ... ອ້າຍເວົ້າກັບບີບວ່າ ເຮືອຊ່ວງຂອງມັນໄຫລອອກກາງທະເລ, ແຕ່ແລ້ວອ້າຍເອງກໍເປັນຜູ້ໜີປະໄປຢ່າງຮີບດ່ວນ...

- ບໍ່ວ່າຕີນ້ອງຊິຈື່ອ້າຍໄດ້? - ຂ້າພະເຈົ້າຖາມ.

- ອ້າຍ ເຊມຸຍແອນ, ເປັນຫຍັງນ້ອງຊິຈື່ອ້າຍບໍ່ໄດ້? ນ້ອງໄດ້ແຕ່ຄຶດວ່າອ້າຍຂີ້ຄຸຍແລະຂະນະນັ້ນກໍບໍ່ຢາກເວົ້ານໍານ້ອງອີກ. ແຕ່ແລ້ວນ້ອງກໍຕັດສິນໃຈຮັກສາທ່າທີເມີນເສີຍແບບດຽວກັນ. ແຕ່ມື້ນີ້... ອຸ້ຍ, ນ້ອງກໍບໍ່ຮູ້ຈັກຊໍ້າວ່າມັນເປັນຫຍັງ, ແຕ່ມັນມີສິ່ງໃດສິ່ງໜຶ່ງດູດດຶງເອົານ້ອງໃຫ້ຍ່າງມາທາງຂົວພີ້...

ພວກເຮົາສົບແສງຕາກັນແລ້ວພ້ອມກັນຫົວ.

-ນ້ອງຮູ້ບໍ່, ເອດີ... ອ້າຍໄດ້ຜ່ານຜ່າການສ່ຽງໄພຮ້ອຍແປດພັນຢ່າງ. ເຊິ່ງບໍ່ອາດຈະເລົ່າຄືນມາໃນເວລານີ້ໄດ້, -ຂ້າພະເຈົ້າເວົ້າ. -ແຕ່ດຽວນີ້ອ້າຍຄິດພຽງແຕ່ສິ່ງດຽວ: "ອ້າຍຍັງຈຳເປັນຈາກແຫ່ງນີ້ໄປອີກບໍ່? ເພື່ອໄປຊອກຫາຄວາມສຸກ, ເພາະວ່າ ມັນກໍຢູ່ນີ້ແລ້ວພວມຢູ່ຂ້າງອ້າຍນີ້ເດ..."

-ຈຳເປັນ, ອ້າຍ ເຊມຸຍແອນເອີຍ, -ເອດີຕອບຢ່າງເຄັ່ງຂຶມ. -ພວກເຮົາໄດ້ຄິດແລະເຂົ້າໃຈຫລາຍຢ່າງຫລາຍແນວກ່ຽວກັບຄວາມເປັນເພື່ອນຂອງພວກເຮົາແລ້ວ. ຄວາມເປັນເພື່ອນນັ້ນມັນມີການປ່ຽນແປງໄປຢ່າງເລິກເຊິ່ງກ່ວາເກົ່າ, ແໜ້ນໜາຍິ່ງກ່ວາເກົ່າ. ບໍ່ຕ້ອງກຽງນ້ອງ, ທີ່ຮັກ. ນ້ອງຮູ້ຈັກອ້າຍດີກ່ວາຕົວຂອງອ້າຍເອງອີກ.

ເປັນອັນວ່າພວກເຮົາໄດ້ກັບມາຮອດເຮືອນ. ເມື່ອແນມເຫັນຂ້າພະເຈົ້າລຸງກໍຮ້ອງຂຶ້ນ:

-ຟ້າເອີຍ!! ຫລານຂ້ອຍ! ເຊມຸຍແອນ, ຍັງມີຊີວິດຢູ່ຫວະ, ບັກນ້ອຍ!...

ແມ່ເຖົ້າ ໂອລີວີອາ ທັງຫອມຂ້າພະເຈົ້າທັງໄຫ້ສະອຶກສະອື້ນດ້ວຍຄວາມຕື້ນຕັນໃຈ.

- ພໍດີແຫລະ, ເຊມຸຍແອນ, -ລຸງຂອງຂ້າພະເຈົ້າເວົ້າຂຶ້ນ ພາຍຫລັງທີ່ເວລານາທີແຫ່ງຄວາມປະເອີບໃຈໃນເບື້ອງຕົ້ນໄດ້ເຢັນລົງແດ່ແລ້ວ. -ມີຫມາຍເຊີນສະບັບຫນຶ່ງຂອງຫ້ອງການ "ລິດລຸຍຍົງ" ສົ່ງມາໃຫ້ຫລານ...

-ຂອງທະນາຄານຫວະ? -ຂ້າພະເຈົ້າຖາມ.

-ແມ່ນແລ້ວ... ເຊັກເງິນສົດ. ຈັກແມ່ນພະນັກງານສົ່ງຫນັງສືຄົນນັ້ນລາວເວົ້າອໍ່ເລືອເກືອກາກອີສັງຢູ່ກັບຍອດຈຳນວນເງິນທີ່ລຸງບໍ່ອາດຈະເຊື່ອໄດ້...

-ເຊັກໂອນເງິນຂອງຫ້ອງກີ່ນຫວະ? -ຂ້າພະເຈົ້າຖາມຍັ່ງເບິ່ງເພາະຄິດສະເດືອກເກິງທ່ານປາກລີນເຕີນ.

-ທາງທີ່ດີ ຫລານຄວນໄປຫັ້ນເລີຍສາ, ແລ້ວກໍຊິຮູ້ລະອຽດທຸກຢ່າງ, -ລຸງຂອງຂ້າພະເຈົ້າບອກ. ພາຍຫລັງທີ່ບັງຄັບໃຫ້ ເອດີ ຕ້ອງສັນຍາວ່າຈະກ້າຢູ່ຫັ້ນແລ້ວ, ຂ້າພະເຈົ້າກໍໄປທີ່ທະນາຄານ.

ພໍແຕ່ໄດ້ຍິນຊື່ສຽງລຽງນາມຂອງຂ້າພະເຈົ້າ ພະນັກງານຫົວຫນ້າຫ້ອງການກໍສັກຂະໂຍງ ອອກມາຈາກຕັ່ງໂລດ.

- ທ່ານ ບິນຫວະຫັ້ນ? ພ້າເອີຍ... ພວກເຮົາໄດ້ສົ່ງຫນັງສືແຈ້ງການໄປໃຫ້ທ່ານເປັນຄັ້ງທີ່ສາມແລ້ວ. ມີເຊັກເງິນສົດໃບຫນຶ່ງຟາກແຕ່ ຮ້ອນລີວູດມາ ໃຫ້ທ່ານ. ກັບຈົດຫມາຍສະບັບຫນຶ່ງ... ທ່ານ ບິນ, ພວກເຮົາຫວັງວ່າທ່ານຈະໄຂບັນຊີຢູ່ທະນາຄານຂອງພວກເຮົາແມ່ນບໍ່?

- ຂໍເບິ່ງຈົດຫມາຍນັ້ນແດ່! - ຂ້າພະເຈົ້າສະເຫນີຂຶ້ນທັນໃດ.

ນີ້ແມ່ນສິ່ງທີ່ຂຽນຢູ່ໃນຈົດຫມາຍ:

"ທ່ານບິນທີ່ຮັກແພງ! ຂໍອະນຸຍາດໃຫ້ຂ້າພະເຈົ້າໄດ້ແຈ້ງມາໃຫ້ທ່ານຊາບວ່າ... ບໍ່, ເຊມຸຍແອນທີ່ຮັກແພງ, ຂ້ອຍບໍ່ຊ່າງຂຽນຈົດຫມາຍແບບເຄັ່ງຂຶມ. ດີທີ່ສຸດແມ່ນຂ້ອຍຈະຂຽນຫາເຈົ້າແບບເປັນກັນເອງຄືກັບຂຽນໃຫ້ລູກສິດຜູ້ມີຄວາມປີຊາສາມາດຂອງຂ້ອຍນີ້ແຫລະ. ຜູ້ພວມຂຽນຫາເຈົ້າຢູ່ນີ້ຄື ກລີບ. ເຈົ້າສະບາຍດີຢູ່ບໍ່, ບ່າວຫນຸ່ມ. ຂ້ອຍຫວັງວ່າໃນທີ່ສຸດ ເຈົ້າກໍຄົງໄດ້ກັບໄປເຖິງຕົວເມືອງນ້ອຍໆຂອງເຈົ້າ. ນັກກົດຫມາຍ ກົດວິນຂອງພວກເຮົາຮູ້ບ່ອນຢູ່ຂອງເຈົ້າໄດ້ຢ່າງຊັດເຈນຈາກເພື່ອນຂອງຕົນຄົນຫນຶ່ງຄືທ່ານຜູ້ສອບສວນ ແກຣັກ. ກົດວິນບອກບ່ອນຢູ່ນັ້ນໃຫ້ຂ້ອຍຮູ້. ເຂົາເຈົ້າທັງສອງຄົນຂໍສົ່ງຄວາມຖາມຂ່າວອັນຈິງໃຈມາຫາເຈົ້າ. ພິເສດແມ່ນແກຣັກ. ລາວມີຄວາມພໍໃຈຍິ່ງກັບຄຳສັງເກດການຂອງເຈົ້າກ່ຽວກັບການເຄື່ອນໄຫວຂອງລາວໂດຍແມ່ນທ້າວ ແບັນຄົນໃດຄົນຫນຶ່ງເຊິ່ງຂ້ອຍບໍ່ຊ່າງຈະເລົ່າຄືນມາໄດ້. ຂ້ອຍຂຽນຈົດຫມາຍນີ້ຫາເຈົ້າກໍເພື່ອບອກແຈ້ງເຖິງລາຍລະອຽດຈຳນວນຫນຶ່ງເຊິ່ງບາງທີເຈົ້າອາດຈະຢາກຮູ້ເມື່ອໄດ້ຮັບເງິນຈຳນວນທີ່ຝາກມານີ້. ເຈົ້າເຫັນບໍ່, ເມື່ອເຂົາເຈົ້າເອົາເຈົ້າຂຶ້ນສານຄັ້ງທຳອິດນັ້ນ ກາຣີປິມແປັກແມັນ ຂອງພວກເຮົາ, ລາຊາແຕ່ງບົດຮູບເງົາ, ໄດ້ນັ່ງຢູ່ທີ່ຫ້ອງຂອງນັກຂ່າວ. ແຕ່ບໍ່ຮູ້ວ່າແມ່ນໂຊກຊາຕາອັນໃດທີ່ໄດ້ຊັກຈູງລາວໄປຫັ້ນ, ກະທັ້ງປະຈຸບັນນີ້ ລາວກໍບໍ່ສາມາດຈະອະທິບາຍໄດ້. ປາກອຳມະຫິດທັງຫລາຍຢືນຢັນວ່າເຄື່ອງຈັກຢູ່ພາຍໃນຂອງລາວ ແລ່ນຢູ່ເປັນປົກກະຕິໄດ້ ໂດຍອາໄສອາຍເຫລົ້າ. ເປັນອັນວ່າກາຣີ ຂອງພວກເຮົານັ່ງຢູ່ໃນສານ ແຕ່ຈິດໃຈແມ່ນເບື່ອຫນ່າຍ. ລາວພວມກຶກມະໂນທຳຂ່ຽວເຂັນ, ເພາະລາວໄດ້ກິນ

ກ້ອນເງິນລ່ວງໜ້າສຳລັບບົດຮູບເງົາບົດໜຶ່ງເຊິ່ງເຂົາເຈົ້າສັ່ງຊື້ຈາກລາວ, ແຕ່ລາວຊໍ້າຫາກໍຂຽນແລ້ວພຽງແຕ່ເຄິ່ງດວງຂອງພາກທີໜຶ່ງເທົ່ານັ້ນ. ບັງເອີນເຈົ້າປະກາດຕົວກັບສານວ່າເຈົ້າເປັນຄົນເປົ່າກ່ວາອາກາດ". ຂະນະນັ້ນເອງແສງສະຫວ່າງອັນໜຶ່ງໄດ້ສ່ອງແວັບຂຶ້ນໃນມັນສະໝອງຂອງ ກາຣີ ຂອງພວກເຮົາ, ຄວາມຄິດປະດິດສ້າງແບບເທບນິຍາຍໄດ້ເລີ່ມເກີດຂຶ້ນໃນຫົວຂອງລາວ, ພໍປານຕົ້ນໄມ້ຢູ່ບົນສວງສະຫວັນປົກຫຸ້ມໄປດ້ວຍໝາກຄຳນີ້ແຫລະ. ຫົວເລື່ອງທີ່ແຫລມຄົມຄືມີດງັບແມັກຊີກ, ຖືກຕຽມພ້ອມໃນນາທີນັ້ນເອງ. ນິ ເຊມຸຍແອນ, ພວກເຮົາຕັ້ງແມ່ນນັກທຸລະກິດການງານແທ້ໃດ. ໜຶ່ງນາທີຕໍ່ມາ ກິດວິນກໍຖືກຈ້າງໃຫ້ໂຕ້ຄະດີຊ່ວຍເຈົ້າ. ກິດວິນຕ້ອງເຫື່ອຊຸດອອກ, ແຕ່ລາວໄດ້ສຳເລັດໜ້າທີ່ແລະຊະນະຜູ້ພິພາກສາ. ສະຫລຸບຄວາມແລ້ວ ບົດຮູບເງົາໄດ້ສຳເລັດ ຫລັງຈາກນັ້ນຄືນໜຶ່ງ. ສ່ວນຕອນເຊົ້າມື້ຕໍ່ມາລາຊາຈໍເງິນ ຊາກລີ ບີແຊ ກໍຖືກນຳໄປສະແດງຢູ່ຕໍ່ໜ້າກ້ອງທີ່ໂຮງສ້າງຮູບເງົາ. ທຸກສິ່ງທຸກຢ່າງລ້ວນແຕ່ເຮັດລັບຫລັງເຈົ້າ ເພື່ອບໍ່ໃຫ້ເຈົ້າເກີດຄວາມວິຕົກ. ແຕ່ຊາກລີ ບໍ່ກ້າສ່ຽງຊີວິດຕີລັງກາຢູ່ເທິງອາກາດ. ລາວເປັນນັກກິລາຂີ້ສູດຜູ້ໜຶ່ງ. ແຕ່ຈຸດໃຈກາງຂອງຮູບເງົາເລື່ອງນີ້ຊໍ້າແມ່ນເກມໂດດທີ່ເຈົ້າຈະຕ້ອງທຳຕາງຊາກລີ. ໃນທີ່ສຸດຮູບເງົາເລື່ອງນີ້ກໍໄດ້ຖືກການຄາດການໄວ້ສອງຄວາມອາດສາມາດ. ໜຶ່ງແມ່ນຄວາມສາມາດທາງສຸຂະຕິກຳ, ກ້າເຈົ້າຫາກສັກຫົວລົງຖືກກະກ້ຽງນ້ຳເກືອນັ້ນ. ສອງແມ່ນວິບາດສະກຳ, ກ້າເຈົ້າເສືອກອອກມາບອກ. ໂຄງເລື່ອງຂອງຮູບເງົາເລື່ອງນີ້ບໍ່ສັບສົນພໍເທົ່າໃດ. ກ່ອນທີ່ຈະມີການກ່າຍທຳ, ໜັງສືພິມສະບັບຕ່າງໆກໍໄດ້ຂຽນເກີງມັນດ້ວຍທ່າອ່ຽງທີ່ຕ່າງກັນ. ຂ້ອຍສວມບົດເປັນພໍ່ເຈົ້າ ເປັນເສດຖີຜູ້ໜຶ່ງ. ໂຟຣີອາກາຕີ, ດວງດາວຈໍເງິນໜ່ວຍໜຶ່ງສວມບົດເປັນແມ່ເຈົ້າ. ຕາມໂຄງຮ່າງແລ້ວ ແມ່ນນາງຕ້ອງໜ່ວງໜ່ຽວອ້ອນວອນບໍ່ໃຫ້ເຈົ້າໂດດ. ເປັນອັນວ່ານາງໄດ້ແລ່ນພວດພາດອອກມາໃນຂະນະທີ່ຂ້ອຍແລະເຈົ້າພວມກ້າວອອກມາສູ່ເວທີສະແດງ. ສະຫລຸບແລ້ວ, ທຸກສິ່ງທຸກຢ່າງລ້ວນແຕ່ເປັນໄປໂດຍສະຫວັດດີພາບ. ບາງທີເຈົ້າອາດຈະໄດ້ເຫັນຕົນເອງຢູ່ເທິງຈໍຮູບເງົາ ຊາກລີແຕ່ງໜ້າໄດ້ດີທີ່ສຸດ ດັ່ງນັ້ນ ຈຶ່ງຄືເຈົ້າປັບເລີຍ. ບາດນີ້ເຂົາເຈົ້າຈຳເປັນຕ້ອງໄດ້ຈ່າຍເງິນຄ່າສະແດງນັ້ນມາໃຫ້ເຈົ້າ. ສິບພັນດອນລ່າສຳລັບເກມໂດດ. ລ່ວນຄ່າສະແດງນັ້ນເຂົາເຈົ້າຕົກລົງວ່າ ກ້າເຈົ້າເວົ້າອອກມາຄວາມໜຶ່ງເຂົາເຈົ້າຈ່າຍໃຫ້ພັນໜຶ່ງ. ດ້ວຍເຫດວ່າເຈົ້າເວົ້າແຕ່

ຫ້າພະຍາງ, ດັ່ງນັ້ນ ເຈົ້າຈຶ່ງໄດ້ຫ້າພັນ. ລວມແລ້ວຄະນະອຳນວຍການໄດ້ຝາກເງິນມາໃຫ້ເຈົ້າສິບຫ້າພັນດອນລ່າ. ເມື່ອໄດ້ຮັບແລ້ວ ເຈົ້າຈົ່ງບອກຂ່າວໃຫ້ຮູ້ແດ່".

ຕໍ່ຈາກນັ້ນ ກລິບໄດ້ວາດພາບເຖິງລາຍການໃຫມ່ອັນໃດອັນຫນຶ່ງຂອງໂຄງການສະແດງແລະຍັງເວົ້າວ່າ ລາວບໍ່ທັນສິ້ນຫວັງທີ່ຈະໄດ້ພົບຂ້າພະເຈົ້າຢູ່ເທິງເວທີສະແດງອີກ.

ຫລັງຈາກຄວາມປະຫລາດໃຈໄດ້ສູນຫາຍໄປຫມົດແລ້ວ ດັ່ງນັ້ນຂ້າພະເຈົ້າຮັບເອົາປຶ້ມເຊັກເງິນຫົວໃຫມ່ອີກຫົວຫນຶ່ງແລ້ວກັບເມືອເຮືອນ. ຂ້າພະເຈົ້ານັ່ງລົງເທິງຕັ່ງນອນຫນ່ວຍເກົ່າຂອງພໍ່ແລະເລົ່າໃຫ້ທຸກໆຄົນຟັງເຖິງຜົນຕອບແທນຕໍ່ໂຊກຊາຕາອັນບັງເອີນນີ້ ຂອງຂ້າພະເຈົ້າ. ພາຍຫລັງທີ່ທຸກໆຄົນໄດ້ໂຮ້ເຫລັກັນຂຶ້ນເພື່ອສະແດງຄວາມດີອົກດີໃຈນຳຂ້າພະເຈົ້າແລ້ວ, ລຸງຂອງຂ້າພະເຈົ້າກໍຖາມຂຶ້ນ:

- ເອີ... ຄັນຊັ້ນດອນນີ້ຫລານຕ້ອງການຫຍັງ?

ຂ້າພະເຈົ້າລໍ່າແຍງຝາເຮືອນອັນແສນສະນິດສະຫນົມ, ບັນດາຕົ້ນໄມ້ໃບຫຍ້າທີ່ແສນຄຸ້ນເຄີຍຢູ່ໃຕ້ປ່ອງຢ້ຽມ, ລໍ່າແຍງບັນດາໃບຫນ້າທີ່ແສນຮັກແພງຂອງຄົນເຫລົ່ານັ້ນແລ້ວກໍຕອບວ່າ:

- ຫລານບໍ່ໄດ້ອາໄລອາວອນຫຍັງກັບເກມໂດດລົງຈາກຮ້ານໂດດ, ກັບອຸທິຍານງູ, ເກມໂດດດັບຊີບແລະສະຫມຸດເຊັກເຫລົ່ານັ້ນອີກແລ້ວ. ຫລານຈະແຕ່ງດອງກັບນາງ ເອດີ ວິນເທ. ແຕ່ງໄວເທົ່າໃດກໍຍິ່ງດີ.

ລຸງຂອງຂ້າພະເຈົ້າໂຍນກອກຂອງຕົນຂຶ້ນ. ສ່ວນແມ່ເຖົ້າໂອລີວີອາ ກັບຮ້ອງໄຫ້, ແຕ່ເດືອຊ້ຳຫນ້າແດງອີ່ຂຶ້ນ.

ແຕ່ພວກເຮົາດຳລົງຊີວິດຢູ່ໃນສະພາບຄອບຄົວອັນອົບອຸ່ນໄດ້ບໍ່ພໍເທົ່າໃດ. ຄວາມສຸກຊື່ນຢູ່ຄຽງຂ້າງເອດີ ຂອງຂ້າພະເຈົ້າ ກໍບໍ່ດົນບໍ່ນານພໍເທົ່າໃດ. ສົງຄາມກໍມາເຖິງ. ບັນດາລາງສັງຫອນຂອງລຸງຂ້າພະເຈົ້າແລະຂອງທ່ານ ປາກລິນເຕີນຜູ້ອຸປະຖຳຂ້າພະເຈົ້າ - ກໍກາຍມາເປັນຄວາມຈິງ. ອ່າວແອຊູໂອເຣີມີກາບັ່ນດຳນ້ຳຂອງພວກຟາດຊິດປະກົດຕົວຂຶ້ນ. ຝູງເຄື່ອງບິນຂອງພວກເຂົາໄດ້ກອກບິນລົງໃສ່ບັນດາຕົວເມືອງສັນຕິຂອງພວກເຮົາ.

ນັບແຕ່ວິນາທີທຳອິດຂອງສົງຄາມ, ພວກເຮົາທຸກຄົນໄດ້ລຸກຂຶ້ນປົກປັກຮັກສາປະເທດຊາດ. ບົບແບັກໂວເຣີ ມີຕຳແຫນ່ງເປັນເຖິງຂັ້ນຮອງຫົວຫນ້າເຮືອຢູ່ເທິງກຳປັ່ນຮົບເຫລັ້ມຫນຶ່ງແລະໄດ້ຮັບຫລຽນໄຊກຽດຕິສັກເປັນໂຫລງ. ລຸງຂອງຂ້າພະເຈົ້າກໍໄດ້ເຂົ້າຮ່ວມກອງປ້ອງກັນອາກາດທ້ອງຖິ່ນແລະໄດ້ມີການປະກອບສ່ວນອັນປະເສີດເລີດລ້ຳຫລາຍຢ່າງ, ເພາະເພິ່ນໄດ້ເຝິກການທະຫານໃຫ້ແກ່ຊາຍຫນຸ່ມ ແອຊູໂອເຣີ. ຂ້າພະເຈົ້າກໍໄດ້ນຸ່ງຊຸດທະຫານແລະເຂົ້າຮັບໃຊ້ໃນກອງທັບ. ເອດີ ຂອງຂ້າພະເຈົ້າພ້ອມດ້ວຍລູກຊາຍນ້ອຍທີ່ຫາກໍເກີດຂອງພວກເຮົາຕ້ອງໄດ້ຜ່ານຜ່າຄວາມທຸກທໍລະມານຫລາຍຢ່າງ. ແຕ່ ທ່ານປາກລິນເຕີນ ໄດ້ກັບມາ ແລະຊິດຊ່ວຍລູກແລະເມຍຂອງຂ້າພະເຈົ້າໃຫ້ຜ່ານພົ້ນວັນເດືອນປີແສນລຳບາກກາກກຳນັ້ນ.

ພາຍຫລັງສົງຄາມຢຸດຕິລົງ. ຂ້າພະເຈົ້າໄດ້ກາຍເປັນຄົນຊ່ວຍວຽກຂອງທ່ານ ປາກລິນເຕີນ. ລູກຊາຍຂອງຂ້າພະເຈົ້າກໍໃຫຍ່ກ້າຫນ້າບານຂຶ້ນມາ ແລະປະຈຸບັນນີ້ກໍໄດ້ເປັນສາດສະດາຈານຊີວະວິທະຍາຄົນຫນຶ່ງແລ້ວ. ໃນໄລຍະດັ່ງກ່າວນັ້ນຂ້າພະເຈົ້າກໍຄົງໄດ້ເປັນພິຍານໃຫ້ແກ່ຄວາມປ່ຽນແປງອັນຜິດປົກກະຕິນາໆປະການຢູ່. ແຕ່ບັນດາການພະຈົນໄພອັນແປກປະຫລາດທີ່ສຸດໄດ້ຕົກເຂົ້າໃສ່ຊາຕາກຳຂອງວານດິກ. ບາງທີຕົກຕອນເຊົ້າອັນສົດໃສງົດງາມໃດຫນຶ່ງ ຂ້າພະເຈົ້າກໍຈະຈັບປາກກາຂຶ້ນມາອີກແລະຂຽນບັນດາບົດເລົ່າຄືນຂອງຕົນຕໍ່ໄປ ຖ້າເມຍຜູ້ສຸດແສນຮັກຂອງຂ້າພະເຈົ້າຫາກຕ້ອງການເຊັ່ນນັ້ນ...

ເຖິງຕອນນີ້ ຂ້າພະເຈົ້າຂໍຢຸດຕິບົດເລົ່າຄືນຕ່າງໆຂອງ ເຊມຸຍແອນປິນ.

# ສາລະບານ


ຫນ້າ

ຕອນທີ່ຫນຶ່ງ . . . . . . . . . . . . . . . 5

ຕອນທີ່ສອງ . . . . . . . . . . . . . . . 48

ຕອນທີ່ສາມ . . . . . . . . . . . . . . . 67

ຕອນທີ່ສີ່ . . . . . . . . . . . . . . . 104

ຕອນທີ່ຫ້າ . . . . . . . . . . . . . . . 137

ຕອນທີ່ຫົກ . . . . . . . . . . . . . . . 152

ຕອນທີ່ເຈັດ . . . . . . . . . . . . . . . 173

ຕອນທີ່ແປດ . . . . . . . . . . . . . . . 196

ຕອນທີ່ເກົ້າ . . . . . . . . . . . . . . . 242

ຕອນທີ່ສິບ . . . . . . . . . . . . . . . 267

ຕອນທີ່ສິບເອັດ . . . . . . . . . . . . . . 308

ຕອນທີ່ສິບສອງ . . . . . . . . . . . . . . 350